ອານໂຕນ ມາກາເຣັນໂກ

ບົນເສັ້ນທາງ ສູ່ຊີວິດ

ເຫລັ້ມທີ ๑

ອານໂຕນ ມາກາເຣັນໂກ

ບົນເສັ້ນທາງ ສູ່ຊີວິດ

ເຫລັ້ມທີ

໑

ບຸນທໍ່ ແກ້ວບົວ
ສ. ສາ.

10 JUN 2010

ສຳນັກພິມ "ຣາດູກາ"
ມົດສະກູ

ແປໂດຍ: ດວງເດືອນ ບຸນຍາວົງ

ແຕ້ມໂດຍ: ໂອເລຍ ປະລຸຊະນີໂກວາ

Антон Макаренко

ПЕДАГОГИЧЕСКАЯ ПОЭМА

В трёх книгах

Книга первая

На лаосском языке

Перевод сделан по изданию:
Макаренко А. С., Собрание сочинений в 7-ми томах,
изд-во Академии педагогических наук РСФСР,
т. I, 1950.

ИБ № 4689

Редактор русского текста *Р. Шубина.* Контрольный редактор *Е. Беляева.* Художник *О. Плужникова.* Художественный редактор *Е. Афанасьева.* Технический редактор *Е. Золотова.* Сдано в набор 28.03.88. Подписано в печать 17.04.89. Формат 84×108¹/₃₂. Бумага типографская. Гарнитура лаосская. Печать высокая. Условн. печ. л. 25,2. Усл. кр.-отт. 25,41. Уч.-изд. л 23,63. Тираж 5180 экз. Заказ № 880. Цена 3 р. 10 к. Изд. № 5573. Издательство «Радуга» В/О «Совэкспорткнига», Государственного комитета СССР по делам издательств, полиграфии и книжной торговли. 119859, ГСП-3, Москва, Зубовский бульвар, 17. Ордена Трудового Красного Знамени Московская типография № 7 «Искра революции» В/О «Совэкспорткнига» Государственного комитета СССР по делам издательств, полиграфии и книжной торговли. 121019, Москва, пер. Аксакова, 13.

© ແປເປັນພາສາລາວ, ສຳນັກພິມ "ຣາດຸກາ", 1989

М 4702010200-084 / 031(01)-89 240-89

ISBN 5-05-002170-7

ISBN 5-05-002171-5

ບຸນສົ່ງ ແກ້ວບົວສາ
ສ. ສາຍບຸ

ບົດທີ ๑

ການສົນທະນາກັບຜູ້ອຳນວຍການພະແນກສຶກສາປະຊາຊົນ

ໃນເດືອນກັນຍາ ປີ ๑๙๘๐ ຜູ້ອຳນວຍການພະແນກສຶກສາປະຊາຊົນຂອງລັດເອີ້ນຂ້າພະເຈົ້າໄປພົບ ແລ້ວເວົ້າວ່າ:

-ນີ້ນ່າທ້າວ ຂ້ອຍຈື່ໄດ້ວ່າເຈົ້າໄດ້ມາຮ້ອງໂຮຕໍ່ວ່າຕໍ່ຂານຢ່າງແຂງຂັນ ຕ້ານກັບວິທີການພວກເຮົາ...ພວກຢູ່ ກຸບຊອບນາກໂຄຊ (ສະພາເສດກະກິດແຫ່ງຊາດປະຈຳແຂວງ) ແບ່ງປັນບ່ອນສຳລັບເຮັດໂຮງຮຽນອອກແຮງງານຂອງເຈົ້າ...

-ແລ້ວຊິບໍ່ໃຫ້ຂ້ອຍຕໍ່ວ່າຊັ້ນຫວະ? ບໍ່ພຽງແຕ່ຕໍ່ວ່າລ້ຽງດອກຂ້ອຍຊິຕ້ອງປ່າວປະກາດໃຫ້ຮູ້ທົ່ວໆໄປ ອັນນີ້ຫວະທີ່ເອີ້ນວ່າໂຮງຮຽນອອກແຮງງານ? ໂຮງຢາ ຫລືວ່າຄອກສັດຍັງຈະດີກ່ວາ. ມັນກະເບິ່ງຄືໂຮງຮຽນຢູ່ເບາະ?

-ເອີ ຂ້ອຍເຫັນແລ້ວວ່າ ເຈົ້າຕ້ອງການຫຍັງ: ຕ້ອງປຸກສ້າງອາຄານໃຫມ່ສະເພາະ, ເອົາໂຕະຕັ່ງໃຫມ່ອ່ຽມໄປໃສ່ ແລ້ວເຈົ້າຈຶ່ງຈະລົງມືເຮັດວຽກ. ເວົ້າແທ້ແລ້ວ ມັນບໍ່ແມ່ນອາຄານດອກທີ່ເປັນບັນຫານະ ທ້າວເອີ້ຍ! ຄວາມສຳຄັນມັນແມ່ນຢູ່ນຳວິທີສຶກສາອົບຮົມສ້າງຄົນໃຫມ່ພຸ້ນ ແຕ່ພວກເຈົ້ານັກວິຊາການສຶກສານີ້ຕິ ພວກເຈົ້າພາກັນບໍ່ພໍໃຈນຳຈັກຢ່າງ: ເຄຫາອາຄານບໍ່ເຫມາະສົມແດ່, ໂຕະຕັ່ງບໍ່ດີ...ພວກເຈົ້າຂາດອັນນີ້ນ່າ ແປວໄຟ...ເຫັນບໍ ແປວໄຟປະຕິວັດນ່າ ພວກ ເຈົ້າໂລດມ້ວກັງວົນສົນໃຈນຳແຕ່ກົບສ້ຽຕົນເອງຢູ່!

- ສ້ຳຂ້ອຍບໍ່ມີກິບເລີຍ!

- ເອ໊ ສຳລັບເຈ້ົ້ຍິກເວ້ັນສ! ອ໋ ພວກປັນຍາຊິນຂ້ີສຸດເອ້ີຍ! ຂ້ອຍນ໊ະ ຊອກໄປຊອກມາຊິຕາຍແລ້ວເດ້ ຊອກຫາຄົນ ຄົນແທ້ໆ ເພາະວຽກງານອັນນ້ີ້ມັນແມ່ນວຽກໃຫຍ່ ພວກເດ້ັກນ້ອຍຕິດໄພສ້ັງ ຄົນເກີດ້ັນນ໋ຳທຸກມ້ີ້ພ໋ານດອກເຫ້ັດ ຍ່ຳງໄປໃສກ໋ຳ, ລ້ັນອອກ ຈາກກະຫນ໋ິນ ຫລ໋ິບເຂ້ົ້າໄປລ້ີ້ຢູ່ໃນເຮ໋ືອນໃນຫ້ອງກ໋ັນບ໋ໍ່ໄຄ່ວ ຜູ້ໃດໆ ກ໋ໍເວ້ົ້າໃຫ້ຂ້ອຍວ່ຳ: ຈ້ັດການແມ້ັນມ່ແມ່ນວຽກຂອງເຈ້ົ້າເດ້ີ, ພວກ ເຈ້ົ້າຮ້ັບຜ້ິດຊອບເລ້ືອງສ໋ຶກສ໋ຳປະຊ໋ຳຊິນເດ້ ແລ້ວຊ໋ິເຮ້ັດແນວໃດລະ?

- ເອ ແລ້ວຊ໋ິເຮ້ັດແນວໃດ?

- ກ໋ໍແມ່ນ້ຍ້ອນແນວນ້ີ້ແລ້ວ, ບ໋ໍ່ມ໋ີໃຜຢ່ຳກຮ້ັບຜ້ິດຊອບເອ໋ົ້າໃຈໃສ່ ໃນເລ້ືອງນ້ີ້ ຫ໋ົມ໋ດທຸກຄົນທ້ີ່ຂ້ອຍອ້ຳປ໋ຳກສະເຫນ໋ີພ໋ານ້ັ້ນຍ໋ິກຕ໋ິນຍ໋ິກ ມ໋ິປະຕ໋ິເສດ ເວ້ົ້າຄວ໋ຳມດ໋ຽວກ້ັນວ່ຳ "ພວກນ້ັ້ນຊ໋ິປ໋ຳດຄ໋ຳຫ້ອຍພວກ ເຮ໋ົ້າຕ໋ຳຍຫ໋ົມ໋ດນ້ັ້ນແລ້ວ" ສ໋ຳລ້ັບພວກເຈ້ົ້ານ້ັ້ນຫ້ະ ມ໋ີ້ຫ້ອງກ໋ຳນດ໋ີ ຈ້ັກຫ້ອງ ປ໋ຶ໊ມອ່ຳນຫລ໋ຳຍໆທ໋ໍ່ນ້ັ້ນແລ້ວ...ນ້ັ້ນເດ້ ໃສ່ແວ່ນຕ໋ຳເຂ້ົ້ຳ ແລ້ວເດ້...

ຂ້ຳພະເຈ້ົ້ຳຫ໋ິວ໊ຂ໋ຶ້ນ:

- ຕ໋ຳຍລະ ແວ່ນຕ໋ຳກ໋ໍເລ໋ີຍເປ້ັນຂອງໂພດໄປແລ້ວ!

- ສ່ອນ້ຂ້ອຍຫ້ະ ຂ້ອຍຊ໋ິບອກເຈ້ົ້ຳເດ້ີ້ວ່ຳ ພວກເຈ້ົ້ຳບ໋ໍ່ຢ່ຳກຫ້ັນ ຫ້ນ້ຳຫນ໋ີຈ໋ຳກປ໋ຶ໊ມດອກ ມ໋ີແຕ່ມ໊ີ້ໃດ໊ມ໋ີ້ຫ໋ົ້ນ ເພ໋ິ່ນສ໋ິ່ງພວກເຈ້ົ້ຳອອກ ໄປຢູ່ນ໋ຳຄົນ ຄົນດ໋ິບໆແດ໋ງໆທ໋ໍ່ນ້ັ້ນລະ ພວກເຈ້ົ້ຳກ໋ໍພ໋ານ້ັ້ນຮ້ອງກ້ັນໂຮ ໂລດວ່ຳ "ມ້ັນຊ໋ິຂ້ຳພວກເຮ໋ົ້ຳແລ້ວ ຄົນດ໋ິບໆແດ໋ງໆຂອງພວກເຈ້ົ້ຳນ໋ີ້ ນ່ຳ", ພວກປ້ັນຍ໋ຳຊ໋ິນແນວນ້ີ້ລະ!

ຜູ້ອຳນວຍການທ່ານນີ້ ເບິ່ງຂ້າພະເຈົ້າຢ່າງເຈາະຈີ້ມປົນຮ້າຍໆ ຕາຂອງລາວນ້ອຍ ແລະດຳຮີມປາກກ້ອງຫນວດຫນາຂອງລາວທັ່ງ ເທຄວາມປ່ອຍດ່າໃສ່ຫນ້ຄວິງຄະນະຍາດສຶກສາຂອງພວກເຮົາຢ່າງບໍ່ ຈ່ຽຍອມ, ແນ່ນອນວ່າຜູ້ອຳນວຍການພະແນກສຶກສາຄົນນີ້ເຮັດບໍ່ ຖືກດອກ.

-ຂໍໂທດ, ຂ້ອຍຂໍເວົ້າແດ່.

-"ຂໍໂທດ", "ຂໍໂທດ" ແລ້ວມີຫຍັງອີກລະ? ເຈົ້າຍັງມີຫຍັງ ເວົ້າກັບຂ້ອຍອີກຊັ້ນຫຍະ? ເຈົ້າຊິເວົ້າແບບນີ້ແມ່ນບໍ່? "ກ້າວ່າ ພວກເຮົາ...ຄືສົມມຸດວ່າ ຄືກັບພວກອາເມລິກາ" ຂ້ອຍຫາກໍໄດ້ອ່ານ ປຶ້ມເຫລັ້ມຫນຶ່ງມໍ່ໆນີ້, ຫມູ່ເອົາໃຫ້ຢືມອ່ານດອກ, ໃນນັ້ນເວົ້າກ່ຽວ ກັບການປະຕິຮູບ...ຟ້າວກ່ອນ ເຂົາເອີ້ນວ່າແນວໃດບຸ? ອ່ າ ຈື່ໄດ້ ແລ້ວ ສະຖານທີ່ປະຕິຮູບ ແຕ່ວ່າຢູ່ບ້ານເຮົາຍັງບໍ່ມີກັນເທື່ອ ສະຖານ ທີ່ແບບນີ້ນ່າ.

-ລອງຟັງຂ້ອຍກ່ອນ.

-ເອົາລະ, ຂ້ອຍຊິຟັງ.

-ກ່ອນການປະຕິວັດກະຄືກັນ ເພິ່ນຮູ້ວິທີດັດສ້າງເດັກນ້ອຍຕິດ ໄພສ້ງຄົນຫມູ່ນີ້, ເຄີຍມີນິຄົມດັດສ້າງຊາວຫນຸ່ມເສຍຄົນມາແລ້ວ.

-ເຈົ້າກໍຮູ້ວ່າ ພວກເຮົາບໍ່ຈຳເປັນເຮັດແບບນັ້ນ...ແບບກ່ອນ ການປະຕິວັດ, ບໍ່ແມ່ນເຮັດແບບນັ້ນນ່າ.

-ຖືກຕ້ອງແລ້ວ ສຳລັບພວກເຮົາ ແມ່ນການສ້າງຄົນໃຫມ່.

-ເຈົ້າເວົ້າວ່າ ສ້າງຄົນໃຫມ່ ເນາະ.

-ແຕ່ວ່າບໍ່ມີໃຜຮູ້ຈັກວິທີການອັນນີ້.

- ແລ້ວເຈົ້າເດ້ລະ?

- ຂ້ອຍກໍຄືກັນ ຂ້ອຍບໍ່ຮູ.

- ຢູ່ພະແນກຂ້ອຍເປັນແນວນີ້ລະ ຂ້ອຍມີຄົນທີ່ຮູ້ວິທີຢູ່.

- ແຕ່ພວກເຂົາບໍ່ຢາກຮັບພາລະ.

- ແມ່ນຈັ່ງຊັ້ນລະ, ພວກຂີ້ຍ້ານ ມັນພາກັນປະຕິເສດຫມົດ.

- ຖ້າວ່າຂ້ອຍຮັບເອົາພາລະອັນນີ້ເດ້ ພວກເຂົາຈະບໍ່ມາເຮັດໃຫ້ຂ້ອຍຫຍຸ້ງຍາກເບາະ? ແມ່ນວ່າຂ້ອຍເຮັດຫຍັງລົງໄປ ພວກເຂົາກໍຈະເວົ້າວ່າ ບໍ່ຖືກໂລດ.

- ກະແທ້ລະ ພວກເຂົາຊິຕ້ອງເວົ້າແນວນັ້ນລະ...ພວກອັບປີຊຸມນັ້ນ.

- ແລ້ວເຈົ້າກໍຈະເຊື່ອພວກເຂົາ ແທນທີ່ຈະເຊື່ອຂ້ອຍ.

- ຈາງເທາະແມ...ຂອຍຊຸບອກພວກເຂົາວ່າ ສູຫາດ່ວນເຮັດເອງໂລດແຫລ້ວ!

- ຖ້າວ່າຂ້ອຍເຮັດບໍ່ຫລ້ອນເດ້ລະ?

ລາວເອົາກຳປັ້ນທຸບໂຕະບາດຫນຶ່ງ:

- ແມ່ນເຈົ້າເອົາຫຍັງມາເວົ້າອີກຮຶ? ເຮັດບໍ່ຫລ້ອນລົ້ມແຫລວ! ເຈົ້າຊິເຮັດບໍ່ຫລ້ອນກະຢ່າຫ້ອເຈົ້າເທາະແມ້! ເຈົ້າຊິຄອງເອົາຫຍັງນຳຂ້ອຍອີກ? ຫາວ່າຂ້ອຍບໍ່ເຂົ້າໃຈຊັ້ນໃດ້ຫັ້ນ ແມ່ນບໍ? ມັນກໍມີອັນຜິດພາດຫັ້ນລະ ແຕ່ວ່າລົງມືເຮັດໄປກ່ອນ ຈາກນັ້ນຈຶ່ງວ່າກັນອັນຕົ້ນຕໍມັນແມ່ນອັນນີ້ລະ ບໍ່ເອົາເດ້ ອັນນີ້ຄົນດັດສ້າງຊາວຫນຸ່ມຕິດໃຜສັງຄົມນະ ແຕ່ໃຫ້ເປັນບ່ອນສຶກສາອົບຮົມທາງສັງຄົມ ເຈົ້າເຂົ້າໃຈລະຕິ...ພວກເຮົາຢາກໄດ້ຄົນໃຫມ່ ຄົນໂຊ້ງດຫັ້ນນ່າ ໃຫ້

ເຈົ້າສ້າງພັນຂຶ້ນມາ ເວົ້າແທ້ແລ້ວຫນິດທຸກຄົນກໍຕ້ອງຮ່ຳຮຽນຄືກັນ ເຈົ້າກໍຄືກັນ ເຈົ້າຈະຮຽນຮູ້ໄປນຳ, ດີແລ້ວທີ່ເຈົ້າບອກກັບຂ້ອຍຈະ ເຈ້ງວ່າເຈົ້າເອງບໍ່ຮູ້ຫຍັງຫັນບ່າ, ໄດ້ແລ້ວລະ...

-ແລ້ວສະກຸນທີ່ເດ້? ຕ້ອງມີເຮືອນມີຕຶກແດ່ລະບໍ.

-ພວກເຮົາມີພຽງພໍ ເພື່ອນເອີຍ ບ່ອນຄັກໆພຸ້ນລະ ແຕ່ກ່ອນ ເຄີຍເປັນບ່ອນດັດສັນດານຊາວຫນຸ່ມຕິດໄພສັງຄົມມາແລ້ວ ບໍ່ໄກ ດອກປະມານ ຜ-ກ ຫລັກປານນັ້ນລະ, ຢູ່ຫັ້ນຄັກແທ້ໃດ ມີປ່າດົງ ທົ່ງນາ ເອີ ເຈົ້າຊິສາມາດລ້ຽງຮອດງົວພຸ້ນລະບໍ.

-ແລ້ວ ພະນັກງານເດ້?

-ເອົາໃຫ້ພ້ອມດຽວນີ້ກໍຍັງໄດ້ບ່າ, ບາງທີເຈົ້າອາດຊິຢາກໄດ້ລົດ ໂອໂຕຈັກຄັນ ກະບໍ່ຮູ້ດອກຫັ້ນ.

-ແລ້ວເງິນເດ້?

-ມີ ນີ້ເດ້ ເອົາແມ້.

ລາວດຶງເງິນມັດຫນຶ່ງອອກມາຈາກລິ້ນຊັກໂຕະ.

-ໜຶ່ງລ້ານ ຮຸບ*, ທ້ຽງຫນິດນີ້ເພື່ອໃຊ້ຈ່າຍໃນວຽກ ງານກໍ່ຕັ້ງ ສ້ອມແປງແດ່ ແລະຊື້ໂຕະຕັ່ງຈຳນວນຫນຶ່ງ.

-ແລ້ວສຳລັບຊື້ງົວເດ້?

-ສຳລັບເລື່ອງນີ້ໂຈະໄວ້ກ່ອນ, ປ່ອງຢ້ຽມເຮືອນຍັງບໍ່ໄດ້ໃສ່ແຜ່ນ ແກ້ວ. ຂຶ້ນແຜນການໃຊ້ຈ່າຍສຳລັບປີຫນຶ່ງມາກ່ອນ.

-ອອກໄປແບບນີ້ ບໍ່ຄັກປານໃດແຫລ້ວ ກ້ຳໄດ້ໄປເບິ່ງກ່ອນຄືຊິ.

---

*ເງິນເປັນໄບ, ທະນະບັດໃນປີ ໑໙໘໐.

-ຂ້ອຍເຄີຍໄປມາແລ້ວ ກ້າເຈົ້າໄປຕື່ມຊິເຫັນຫຍັງຂົ່ນຂ້ອຍຊັ້ນ ຫວາ? ພໍລະ ອອກເດີນທາງໄດ້ເລີຍ.

-ຈັ່ງຊັ້ນກໍໄດ້, ຂ້າພະເຈົ້າເວົ້າຢ່າງປອດໂປ່ງຫົວໃຈ ເພາະໃນເວລານັ້ນຂ້າພະເຈົ້າຍັງບໍ່ເຄີຍເຫັນສະຖານທີ່ໃດຫນ້າເບື່ອຫນ່າຍເທົ່າກັບຫ້ອງການຂອງ "ກຸບຊອບນາກໂຄຊ" ແຫ່ງນີ້ເລີຍ.

-ຊິມເຊີຍ! ທ້າວ, ຜູ້ອຳນວຍການສະຫລຸບສັ້ນໆ, ລົງມືຈັດການໂລດ ບໍ່ມີຫຍັງດີ້ວ່ເສດໄປກ່ວານີ້ດອກ!

ບົດທີ ๔

ຄວາມປະລາໄຊໃນຂັ້ນຕົ້ນຂອງນິຄົມ ກ້ອກກີ

ຫ່າງຈາກ ໂປນຕາວ ໄປ ຝ ກິໂລແມັດ ມີດົນຕອນຫນຶ່ງ ກ້ວ້າງປະມານ ๔๐๐ ເຮັກຕາປົກຄຸມໄປດ້ວຍປ່າແປກຍາວຢ່ງດລງບໄປຕາມໂນນດິນຊາຍແຄມກະຫນົນຫລວງສາຍໄປ ຄາຄົບ, ກ້ອນຫີນປູກະຫນົນຫມອງຫມົ່ນບໍ່ໃສເຫລື້ອມເທົ່າທີ່ຄວນເລີຍ.

ຢູ່ກາງປ່າແຫ່ງນີ້ມີໂຄກກ້ວ້າງປະມານ ๔๐ ເຮັກຕາບ່ອນຫນຶ່ງ ໃນນີ້ມີເຮືອນຕຶກກໍ່ດ້ວຍດິນຈີ່ຮູບ ๔ ຫລ່ຽມມົນທົນຈຳນວນ ๕ ຫລັງ ຕັ້ງຈຸ້ມກັນຢູ່ແຈຫນຶ່ງ : ນະທ່ີ້ນີ້ແມ່ນບ່ອນຕັ້ງນິຄົມໃຫມ່ ສຳລັບຊາວຫນຸ່ມຕິດໄພສ້ງຄົມ.

ເດີ່ນດິນຊາຍລາມກ້ວ້າງອອກຈອດຕໍ່ກັບປ່າພືແຄມຫນອງນ້ອຍໆ ແຫ່ງຫນຶ່ງ ເຊ່ິງຢູ່ຟາກຫນຶ່ງພຸ້ນເພິ່ນພໍແນມເຫັນຫລັງຄາມຸງຫຍ້າ ຂອງກຸ່ມນາພວກກູລັກ (ຊາວນາຮ່ັ) ຫລາຍຫລັງ. ໄກອອກໄປອີກ

ແມ່ນທ້ອງຟ້າ ຂີດເປັນຮອຍຍາວດ້ວຍແກວຕົ້ນບູໂລແກ່ ແລະຫລັງ ຄາເຮືອນນຸ່ງຫຍ້າອີກ ๘-๙ ຫລັງ.

ກ່ອນການປະຕິວັດ ສະຖານທີ່ນີ້ແມ່ນນິຄົມກັກຂັງເດັກນ້ອຍ ບ່ອນຫນຶ່ງ, ມັນຍຸບໄປເມື່ອປີ ๑๙๑๗ ແຕ່ກໍປະຮ່ອງຮອຍຂອງພຶດ ຕິກໍາແຫ່ງການສຶກສາອົບຮົມຂອງມັນໄວ້ ໂພແຕ່ບາງເບົາເທົ່ານັ້ນ. ຖ້າຫາກຕີລາຄາເອົາຕາມຮ່ອງຮອຍ ທີ່ຝັງມັ່ງມູ່ໃນປຶ້ມບັນທຶກຫົວ ຂາດງຶດງຫລາຍເຫລັ້ມນັ້ນ ກໍພໍຮູ້ໂລດວ່າແມ່ນພວກຄູດູແລນັກ ຮຽນ ເຊິ່ງຄົງຕ້ອງໄດ້ຮັບການຄັດເລືອກມາຈາກກຸ່ມນາຍສິບນາຍຈ່າ ທະຫານກົນບໍານານຢ່າງແນ່ນອນແລ້ວນັ້ນ ເປັນຜູ້ປະຕິບັດຫນ້າທີ່ວິ ຊາການຄູເອງ. ຫລັກການເຫລົ່ານີ້ມີຄວາມຫມາຍວ່າ ຕ້ອງບໍ່ວາງ ສາຍຕາຈາກພວກນັກຮຽນ ທັງໃນເວລາເຮັດວຽກ ແລະທັງໃນເວລາ ພັກຜ່ອນ, ເວລານອນກໍຕ້ອງນອນຢູ່ໃນຫ້ອງໃກ້ໆກັບບ່ອນນອນຂອງ ພວກເດັກນ້ອຍ. ອີງຕາມຄໍາບອກເລົ່າຂອງພວກຊາວນາອ້ອມແອ້ມ ນັ້ນ ຍັງພໍເຂົ້າໃຈໄດ້ອີກວ່າ ວິທີການທີ່ພວກຄູດູແລເຫລົ່ານີ້ຊົມໃຊ້ ເພື່ອດັດສ້າງບ່ຽນນິໄສນັກຮຽນຂອງພວກເຂົານັ້ນ ບໍ່ມີຫຍັງສັບສົນພິ ລຶກແຕກຕ່າງຈາກວິທີການອື່ນໆເລີຍ. ສັນຍະລັກຮູບນອກຂອງມັນ ກໍ ແມ່ນໄມ້ຄ້ອນທໍາມະດາ ທໍາມະດານີ້ເອງ.

ຮ່ອງຮອຍເຂົ້າຂອງວັດຖຸຂອງນິຄົມທີ່ວ່ານີ້ ຍັງມີຫນ້ອຍກ່ວານີ້ ອີກ. ຜູ້ຄົນທີ່ຢູ່ໃກ້ຄຽງພາກັນຫອບຂົນເອົາທຸກສິ່ງທຸກຢ່າງທີ່ໄດ້ຊື່ວ່າ ເປັນວັດສະດຸ ເມື່ອໄວ້ເລົ້າຂອງພວກເຂົາຫມົດເຊັ່ນວ່າອຸປະກອນຢູ່ ໃນໂຮງຊ່າງແລະສາງ, ເຄື່ອງໂຕະຕັ່ງ. ນອກນີ້ຕົ້ນໄມ້ໃນສວນກໍຍັງ ຖືກຂຸດກົ້ນຍ້າຍໄປນໍາ, ເບິ່ງໄປແລ້ວເຫດການອັນນີ້ບໍ່ມີຫຍັງທີ່ຈະ

ພາໃຫ້ຄຶດເຖິງການປຸ້ນສະດົມຂອງພວກຄົນປ່າດອກ. ພວກຕົ້ນໄມ້ກົນຫມາກນັ້ນ ບໍ່ກຶກຕັດຮອນງ່າດອກ ແຕ່ກຶກຂຸດກົ່ນຍ້າຍໄປປູກໃສ່ບ່ອນອື່ນເລີຍ, ບໍ່ມີເສດແກ້ວແຕກຈັກຫນ້ອຍ, ພວກເຂົາຮູ້ຈັກມ້ຽ ກອດເອົາຢ່າງກຶກຕ້ອງຕາມກົດເກນທຸກຢ່າງ, ບໍ່ມີໃຜຈັກຄົນເອົາຂວານຟາດຟາຜັກຕູດ້ວຍຄວາມໂມໂຫ ແຕ່ຄ່ອຍມ້ຽນັ້ນອອກຈາກບານພັບຢ່າງລະມັດລະວັງ. ເຕົາຝີງກໍ່ດ້ວຍດິນຈີ່ກຶກມ້ຽອອກເທື່ອລະກ້ອນ ຢູ່ໃນຫ້ອງເຮືອນພັກເກົ່າຂອງຜູ້ອຳນວຍການນັ້ນ ຍັງເຫລືອພຽງຕູ້ໃສ່ອາຫານຫນ່ວຍດຽວ.

- ເປັນຫຍັງເຂົາຈຶ່ງບໍ່ເອົາຕູ້ຫນ່ວຍນີ້ໄປ?

ຂ້າພະເຈົ້າຖາມ ລຸກາ ເຊມືອໂນວິດ ແວກໂກລາ ຄົນບ້ານໃກ້ເຮືອນຄຽງຜູ້ຫນຶ່ງທີ່ມາກຽງນາ ເພື່ອສອດສ່ອງເບິ່ງເຈົ້າຂອງກົ່ນການຜູ້ໃຫມ່.

- ເວົ້າກັບເຈົ້າຊື່ໆເນາະ, ອັນວ່າຕູ້ຫນ່ວຍນີ້ ມັນບໍ່ມີປະໂຫຍດຫຍັງສຳລັບພວກເຮົາເລີຍແຫລະ, ຄັນຊິມ້ຽເນາະ ເຈົ້າກໍເຫັນລະຕິວ່າມັນຊິເປັນແນວໃດ? ຄັນຊິເອົາມັນເຂົ້າໄປມ້ຽນໃນເຮືອນໃນຊານຂອງພວກເຮົາຫລື ກໍບໍ່ມີທາງເປັນໄປໄດ້, ບອກເຈົ້າຊື່ໆ, ເບິ່ງເອົາບໍ່ວ່າທາງສູງຫລືທາງຂວາງ...

ຢູ່ຕາມຂອກແຈໂຮງລົດມ້ຽມີກອງຂີ້ເຫຍື້ອ, ເສດໄມ້ຫັກເປ່ເພກອງເຕັມໄປຫມົດ ແຕ່ບໍ່ມີສິ່ງທີ່ມີຄ່າດອກ, ສະເພາະສິ່ງຂອງທີ່ພວກເຂົາລັກເອົາໄປຫວ່ານບໍ່ຄົນມານີ້ ພວກເຮົາສາມາດຕິດຕາມຊອກເອົາຄືນມາໄດ້ ເຊັ່ນຈັກຫວ່ານແນວປູກເກົ່າໆຫນ່ວຍຫນຶ່ງ, ໂຕະຊ່າງໄມ້ໂຊະເຊະພໍແຕ່ຕັ້ງຢູ່ ຊ ຫນ່ວຍ, ມ້ຽພັນຫລ້ອນສີຕິວຫນຶ່ງ

ເຊິ່ງແຕ່ກ່ອນຄົງທະນົງໃຈໃນສາຍເລືອດ ກົກກ້ຶດຂອງມັນສົມຄວນ, ແຕ່ບັດນີ້ມັນເກົ່າແກ່ຮອດ ສິບ ປີແລ້ວ; ນອກນີ້ມີລະຄັງເຮັດດ້ວຍທອງຫນ່ວຍຫນຶ່ງ.

ຂ້າພະເຈົ້າໄດ້ຮູ້ຈັກກັບ ກາລິນາ ອີວາໂນວິດ ຜູ້ຮັບຜິດຊອບສະຫມຸດບັນຊີການເສດກະກ້ຶດຂອງນິຄົມແລ້ວ. ລາວຕ້ອນຮັບຂ້າພະເຈົ້າດ້ວຍຄຳຖາມອັນນີ້:

-ເຈົ້າເປັນຜູ້ອຳນວຍການຝ່າຍວິຊາການຄູບໍ່?

ໃນເວລາບໍ່ດົນ ຂ້າພະເຈົ້າກໍຈັບໄດ້ວ່າ ລາວເວົ້າດ້ວຍສຳນຽງຂອງຄົນເຂດ ອູກຣາອິນເກົ່ງແມ່ນວ່າຕາມຫລັກການແລ້ວ ລາວບໍ່ຮູ້ຈັກພາສານີ້ກໍຕາມ. ເວລາເວົ້າ ລາວໃຊ້ສັບພາສາອູກຣາອິນ ຫລາຍຄຳ ແລະ ເນັ້ນສຽງ "ກ" ແບບຄົນພາກໃຕ້. ແຕ່ສຳລັບຄຳ "ວິຊາການຄູ" ລາວຕົດນິໄສເນັ້ນສຽງພະຍາ "ການ" ເປັນພິເສດ ແລະ ອັນນີ້ກໍແມ່ນລັກສະນະສະເພາະໃນການອອກສຽງເນັ້ນຂອງນັກວັນນະຄະດີວິຊາວັດເຊຍ.

-ເຈົ້າເປັນຜູ້ອຳນວຍການຝ່າຍ "ວິຊາ ການ ຄູ" ແມ່ນບໍ?

-ເປັນຫຍັງຈຶ່ງວ່າຊັ້ນ? ຂ້ອຍເປັນຜູ້ອຳນວຍການຂອງນິຄົມ...

-ບໍ່ເດ໊, ລາວຕອບທັງດຶງກອກອອກຈາກປາກ, -ເຈົ້າເປັນຜູ້ອຳນວຍການຝ່າຍວິຊາການຄູ ສ່ວນຂ້ອຍເປັນຜູ້ອຳນວຍການຝ່າຍເສດກະກ້ຶດ.

ພວກທ່ານຈົ່ງຄິດເກົ່ງພາບເທບພະເຈົ້າ "ບັນ" ເຊິ່ງ ຈະຮູແບນເດ້ມໄວ້ຫ້ັນກ່ອນ ແຕ່ຈົ່ງຈອນຜົມເຫນືອຫູໄວ້ຈັກຫນ້ອຍ, ກ້ຳໂກນເຄົ້າແລະຕັດຫນວດອອກໃຫ້ມັນ ແບບນັກບວດນິກາຍຣິດ

ເດີ. ຍັດກອກເຂົ້າໃສ່ປາກໃຫ້ມັນ, ເຮັດແບບນີ້ແລ້ວ ແທນທີ່ຈະ
ເປັນຮູບເທບພະເຈົ້າປັ້ນ, ພວກທ່ານກໍຈະໄດ້ພາບ "ກາລິນາ ອິວາ
ໂນວິດ ແຊກຍວກ" ເຊິ່ງເປັນຄົນສັບສົນພິລຶກເກີນທີ່ຈະມາເຮັດຫນ້າ
ທີ່ສະຫມຸດບັນຊີອັນງ່າຍດາຍຂອງນິຄົມເດັກນ້ອຍແຫ່ງຫນຶ່ງເຊັ່ນນີ້. ລາວຜ່ານຊີວິດມາແລ້ວບໍ່ຫນ້ອຍກ່ວາ ຫ0 ປີ ແລະພຶດຕິກໍາຫລາຍ
ແບບຫລາຍແນວມາແລ້ວບໍ່ຫນ້ອຍ. ແຕ່ສິ່ງທີ່ລາວອວດອ້າງທີ່ສຸດກໍ
ແມ່ນສອງສະໄຫມນີ້ເທົ່ານັ້ນຄື: ໃນຄາວຫນຸ່ມນ້ອຍລາວ ໄດ້ເປັນ
ທະຫານມ້າກອງຮັກສາພະອົງເຂດ ແກັກສະກອນ ແລະໃນປີ ໑ລ໑ຊ
ໄດ້ຊີ້ນໍາການອົບພະຍົບປະຊາຊົນອອກຈາກເມືອງມຸງກໂກໂຣດ ເມື່ອ
ພວກເຢຍລະມັນບຸກໂຈມຕີເມືອງນີ້.

ກາລິນາ ອິວາໂນວິດ ກາຍເປັນເປົ້າຫມາຍທໍາອິດແຫ່ງການ
ເຄື່ອນໄຫວອົງການສຶກສາອົບຮົມຂອງຂ້າພະເຈົ້າ. ສິ່ງທີ່ເຮັດໃຫ້
ວຽກງານຂອງຂ້າພະເຈົ້າຫຍຸ້ງຍາກຂຶ້ນຕື່ມນັ້ນ ກໍແມ່ນຄວາມເຊື່ອ
ຫມັ້ນແບບຕ່າງໆຢູ່ໃນຕົວຂອງລາວ. ລາວປ້ອຍດ່າຊົນຊັ້ນນາຍທຶນ,
ພວກໂບນເຊວິກ, ພວກລັດເຊຍ, ພວກຢິວ, ຄວາມເລິ້ນເລ້ຂອງ
ພວກເຮົາ ແລະຄວາມຄັກແນ່ແບບພວກເຢຍລະມັນ ດ້ວຍຖ້ອຍຄໍາ
ດຽວກັນ. ແຕ່ດວງຕາຄູ່ສີຟ້າຂອງລາວນັ້ນໂຮງຮຸ່ງໄປດ້ວຍຄວາມຮັກ
ຊີວິດ, ລາວເປັນຄົນວ່ອງໄວ ກຽມພ້ອມທີ່ຈະຮັບແລະລະມັດລະວັງ
ຫລາຍ ຈົນຂ້າພະເຈົ້າບໍ່ສ່ວງທີ່ຈະສະຫລະພະລັງແຮງໃນດ້ານວິ
ຊາການຄູສ່ວນຫນຶ່ງໃຫ້ແກ່ລາວ. ຂ້າພະເຈົ້າລົງມືອົບຮົມລາວໃນຊຸມ
ມື້ທໍາອິດ ຄືນັບແຕ່ການພົບປະຄັ້ງທໍາອິດເປັນຕົ້ນມາໂລດ.

-ແຕ່ວ່າ...ສະຫາຍ ແຊກຍວກ, ເຈົ້າຄຶດແນວໃດກ່ຽວກັບ

ເລື່ອງ ນິຄົມຫນຶ່ງທີ່ບໍ່ມີຜູ້ອຳນວຍການ ເປັນໄປບໍ່ໄດ້ດີ ຕ້ອງມີຜູ້ໃດຜູ້ຫນຶ່ງຮັບຜິດຊອບລວມລະບໍ?

ອີກຄັ້ງຫນຶ່ງ, ກາລິນາ ອີວາໂນວິດ ດຶງກອກອອກຈາກປາກ ແລ້ວຫ່ຽງຫົວມາຫາຂ້າພະເຈົ້າຢ່າງສຸພາບ.

- ຊັ້ນແປວ່າເຈົ້າຢາກເປັນຜູ້ອຳນວຍການນິຄົມແມ່ນບໍ? ແລ້ວໃຫ້ຂ້ອຍນີ້ເປັນຜູ້ຮອງຊັ້ນຫວາ?

- ບໍ່ຈຳເປັນວ່າຈະເປັນແນວນັ້ນດອກ, ໃຫ້ຂ້ອຍເປັນຜູ້ຮອງເຈົ້າກໍໄດ້ຖ້າເຈົ້າຕ້ອງການ.

- ຂ້ອຍບໍ່ໄດ້ຮຽນ "ວິຊາຄູມາ", ເຮັດວຽກໃຜວຽກມັນສາ ແຕ່ວ່າເຈົ້ານັ້ນຍັງຫນຸ່ມຍັງນ້ອຍຢູ່ແທ້ໆ ແລ້ວເຈົ້າຊ້ຳຜັດຢາກໃຫ້ຂ້ອຍຜູ້ເກົ່ານີ້ ເປັນຜູ້ຮອງນ້ຳຮອງຕີນ, ແບບນີ້ມັນບໍ່ດີດອກ! ແຕ່ວ່າສຳລັບການເປັນຜູ້ອຳນວຍການນິຄົມນັ້ນກໍ, ເຈົ້າກໍຮູ້ລະຕໍ່ວ່າ ຂ້ອຍບໍ່ໄດ້ຮ່ຳໄດ້ຮຽນມາພຽງພໍ... ແລ້ວກະ...ມັນບໍ່ແມ່ນທຸລະອີ່ຫຍັງຂອງຂ້ອຍເລີຍບໍ່ແມ່ນຫວະ?

ລາວລາຈາກຂ້າພະເຈົ້າດ້ວຍຄວາມຮູ້ສຶກຕຶບຕັນໃຈ, ເຮັດຫນ້າບູດແລະຫ່ວນເຫງົາຢູ່ຫມົດມື້, ຈົນຮອດມື້ແລງລາວມາພົບຂ້າພະເຈົ້າຢູ່ໃນຫ້ອງນອນ, ທ່າທີເສົ້າໂສກສຸດຂີດ.

- ຂ້ອຍເອົາໂຕະຂີ້ຮ້າຍຫນ່ອຍນີ້ກັບຕຽງຕາຍໆຫນ່ອຍນີ້ມາໃສ່ຫ້ອງເຈົ້າ, ຂອງທີ່ພໍຫາໄດ້...

- ຂອບໃຈແລ້ວ.

- ຂ້ອຍຄຶດຄັກແລ້ວວ່າ ພວກເຮົາຄວນຈັດການແນວໃດກ່ຽວກັບນິຄົມນີ້. ຂ້ອຍເຫັນວ່າຜູ້ສົມຄວນເປັນອຳນວຍການນັ້ນ ກໍແມ່ນ

ເຈົ້າຫັ້ນລະ ສ່ວນວ່າຂ້ອຍຫນີ້ ກະສົມຄວນເປັນຜູ້ຮອງຂອງເຈົ້າຫັ້ນ ລະ.

-ພວກເຮົາຈະເຂົ້າອົກເຂົ້າໃຈກັນ, ກາລິນາ ອິວາໂນວິດ.

-ຂ້ອຍກໍຄຶດຄືກັນວ່າ ພວກເຮົາຈະເຂົ້າໃຈກັນ. ວຽກງານອັນນີ້ ມັນບໍ່ໃຊ່ວ່າເລີກລັບພໍປານໃດ, ພວກເຮົາແຕ່ລະຄົນກໍເຮັດວຽກຕາມ ຫນ້າທີ່. ແຕ່ວ່າໃນນາມເຈົ້າຫັ້ນເປັນຄົນມີການສຶກສາ ເຈົ້າກໍຈະ ເຮັດຫນ້າທີ່ອັນທີ່ເອີ້ນວ່າ ຜູ້ອຳນວຍການ.

ພວກເຮົາພາກັນລົງມືເຮັດວຽກ, ອາໄສໄມ້ງັດຕ່າງໆ ມ້າຈ່ອຍ ອາຍຸ ມ0 ປີຕົວນັ້ນຈົ່ງລຸກຂຶ້ນຢືນເທິງ ๔ ຂາມັນໄດ້, ກາລິນາ ອິວາໂນວິດ ຂຶ້ນໄປງອຍຢູ່ເທິງບ່ອນນັ່ງກ່າຍແບບບ່ອນນັ່ງລົດມ້າ ບຣິດກາ ເຊົ່າໄຫເຮືອນໃຫ້ຜູ້ຫນຶ່ງນຳມາມອບໃຫ້ພວກເຮົາຢ່າງສະ ຫງ່າຜ່າເຜີຍ ແລ້ວຍານຍົນອັນນີ້ ກໍເຄື່ອນຍ້າຍມຸ່ງຫນ້າໄປຍັງໃນ ເມືອງດ້ວຍຄວາມໄວປະມານ ๔ ກິໂລແມັດຕໍ່ຊົ່ວໂມງ. ອັນເວລາ ແຫ່ງວຽກງານຈັດຕັ້ງ ຕັ້ງແຮກຂຶ້ນແລ້ວ.

ໃນລະຍະນີ້ ໂຄງການອັນເຫມາະສົມກ່ວາຫມູ່ຫມົດ ແມ່ນການ ຮຶບໂຮມວັດຖຸສິ່ງຂອງ ມີຄ່າອັນຈຳເປັນສຳລັບການສຶກສາອົບຮົມຄົນ ໃຫມ່. ຕະຫລອດເວລາສອງເດືອນ, ກາລິນາ ອິວາໂນວິດຂີ່ກອງມ ມ້າໄປ ສ່ວນຂ້າພະເຈົ້າຍ່າງໄປ. ລາວຄຶດວ່າວິທີການເດີນທາງແບບ ນີ້ ບໍ່ສົມສັກສີຂອງລາວ, ສ່ວນຂ້າພະເຈົ້າແລ້ວບໍ່ສາມາດເຮັດແນວ ໃດໄດ້ຕໍ່ຫນ້າທ່າທີຂອງມ້າພັນ "ກິກກິດ" ຕົວນີ້.

ໃນລະຍະສັ້ນໆນີ້ ອາໄສການຊ່ວຍເຫລືອຂອງພວກນາຍຊ່າງ ຊາວບ້ານ ພວກເຮົາທຳການຟື້ນຟູສ້ອມແປງອາຄານຫລັງຫນຶ່ງຂອງ

ນິຄົມໃຫ້ມີສະພາບພໍເບິ່ງໄດ້ ບາງບ່ອນກໍດີ ບາງບ່ອນກໍບໍ່ດີ ພວກເຮົາ
ເອົາດິນກາໂລປູພື້ນ, ລ້ອມແປງເຕົາຜິງ, ໃສ່ບານຜັກຕູ້ຄົນ. ສ່ວນ
ຂົງເຂດນະໂຍບາຍພາຍນອກນັ້ນ ພວກເຮົາປະສົບໄຊຊະນະແຕ່ໃນ
ເລື່ອງດ່ວນ ແຕ່ມີຄວາມສຳຄັນສົມຄວນ ຄືສາມາດເຮັດໃຫ້ຄະນະກຳ
ມາທິການພິເສດສະບາງ ແຫ່ງກອງທັບຫນູນພາກ I ສົ່ງແປ້ງເຂົ້າຈີ່
ເຫລືອງຈຳນວນ ໑໕໐ ປຸດ* ມາໃຫ້. ພວກເຮົາໂຊກບໍ່ດີປານໃດ
ທີ່ບໍ່ສາມາດຮີບໂຮມວັດຖຸມີຄ່າອື່ນໆໄດ້.

ເມື່ອສົມທົບຜົນຮວມຍອດອັນນີ້ໃສ່ກັບອຸດົມການ ທີ່ມີຢູ່ແລ້ວ
ໃນສ່ວນກ່ຽວກັບການເກັບກຳສະສົມວັດຖຸນັ້ນ ຂ້າພະເຈົ້າຈຶ່ງຕັ້ງຂໍ້ສັງ
ເກດອັນນີ້ໄດ້: ເຖິງແມ່ນວ່າ ຂ້າພະເຈົ້າເກັບກຳສະສົມໄດ້ຫລາຍ
ກ່ວານີ້ຮອດຮ້ອຍເທົ່າ ແຕ່ຄວາມເປັນຈິງກັບອຸດົມການ ກໍຍັງຄົງຫ່າງ
ໄກກັນຫລາຍຢູ່ຄືເກົ່າ. ສິ່ງດັ່ງກ່າວບັງຄັບໃຫ້ຂ້າພະເຈົ້າປະກາດວ່າລະ
ຍະຈັດຕັ້ງອົງການສ້ຽງສຸດລຶ້ງແລ້ວ. ການິນາ ອິວາໂນວິດ ເຫັນ
ພ້ອມກັບທັດສະນະຂອງຂ້າພະເຈົ້າ:

-ແມ່ນເຈົ້າຊິຫາເຫັບອີ່ສັ້ງໄດ້ອີກ ໃນເມື່ອວ່າພວກຜາກຫມູ່ນັ້ນ
ທຸບທຸກຢ່າງໃຫ້ມຸ່ນອຸ້ຍປຸ້ຍປານກ່ານໄຟແລ້ວຈັ່ງຊີ? ພວກເຂົາສ້າງ
ຄວາມຈິບຫາຍວາຍວອດໃຫ້ແກ່ປະຊາຊົນ, ເຈົ້າເຂົ້າໃຈບໍ່, ບັດນີ້
ເຈົ້າຫາດ້ຳຕ້ອງຕໍ່ສັ້ນ. ພວກເຮົາຄວນເຮັດຄືກັບ ມີລີຢາ ມູໂຄເມດ
ສັ້ນ...

---

*ຫົວຫນ່ວຍຊັ່ງນ້ຳຫນັກຢູ່ລັດເຊຍສະໄຫມເກົ່າ, ເທົ່າກັບ ໑໒
ກິໂລກຣາມ.

- ອີລີຢາ ນູໂຣແມດ ໃດ?

- ໂຍ້ວ ກະມີລະບໍ ທ້າວຫນຶ່ງຊື່ ມີລີຢາ ນູໂຣແມດ...ເຈົ້າອາດຊິເຄີຍໄດ້ຍິນຊື່ນີ້ຢູ່ດອກ, ແມ່ນແຕ່ພວກຜາກຫັ້ນເກາະ, ເຂົາກໍຍັງມີອັດສະວິນຂອງພວກເຂົາໃດ; ແຕ່ຂ້ອຍຄຶດວ່າ ມັນແມ່ນຂໍທານຜູ້ຫນຶ່ງ, ເປັນຄົນບໍ່ເຮັດວຽກເຮັດງານອີ່ຫຍັງຊິງນີ້ລະ: ມັນຂີ້ລ້ຽວ ເລາະຫລົ້ນຕະຫລອດລະດູຮ້ອນ, ເຈົ້າເຫັນແບບນີ້ຢູ່ຫນີ້ລະ.

- ຄັນຊັ້ນ, ພວກເຮົາກໍເຮັດຄືກັນກັບ ອີລີຢາ ນູໂຣແມດ ຫັ້ນ ໂລດແຫລ້ວ. ບໍ່ຂີ້ຮ້າຍດອກ. ແຕ່ສາລິກາຈອມພານ* ເດລະ, ຢູ່ຫນ້ຶກະມີຢູ່ຫວະ?

- ສາລິກາຈອມພານຫັ້ນຫວະ ມີບໍ່ອຶດ, ອາວເອີ້ຍ, ຊິເອົາຫລາຍຈໍ່າໃດກະໄດ້...

ທີ່ນີ້ຄົນດັດສ້າງມີນາງຄູສອງຄົນມາຢູ່ນໍາພວກເຮົາຄື: ເອີກາເຕີຣີນາ ກຣີກໍເຮັບນາ ແລະລິດາ ເປຕຣອບນາ. ຂ້າພະເຈົ້າ ໄດ້ອອກແຮງຊອກຫາຜູ້ຊ່ວຍວຽກທາງດ້ານວິຊາຄູສອງຄົນນີ້ເອົາແທ້ເອົາວ່າ ແລະຈົນເກືອບຈະສິ້ນຫວັງຢູ່ແລ້ວ: ເພາະບໍ່ມີຜູ້ໃດຕ້ອງການອຸທິດຕົນເພື່ອກໍ່ສ້າງຄົນໃຫມ່ຢູ່ໃນດິງຂອງພວກເຮົາ; ທຸກຄົນລ້ວນແຕ່ຢ້ານກົວພວກ "ເດັກນ້ອຍເກເລ" ແລະກໍບໍ່ມີໃຜເຊື່ອວ່າກິດຈະການຂອງພວກເຮົາຈະຫັນປ່ຽນໄປໃນທາງທີ່ດີຂຶ້ນ. ແລະຢູ່ທີ່ກອງປະຊຸມຄູຊົນນະບົດນັ້ນເອງ, ຊຶ່ງຂ້າພະເຈົ້າຕ້ອງໄດ້ລົງທຶນກອກເທສົມບັດ

---

* ແມ່ນໂຕກົງໃນນິທານຊຶ່ງຖືກປາບໂດຍ ອີລີຢາ ນູໂຣແມດ

ທາງດ້ານວາທະສິນຢ່າງຫລວງຫລາຍພາຍນາກຈົ່ງໄດ້ມະນຸດສອງຄົນ
ນີ້ນາ. ຂ້າພະເຈົ້າຮູ້ສຶກພໍໃຈເປັນຢ່າງຍິ່ງທີ່ເຂົາເຈົ້າທັງສອງແມ່ນ
ເພດຍິງ, ເພາະຂ້າພະເຈົ້າຄຶດວ່າ "ອິດທິພົນອັນຍິ່ງໃຫຍ່ຂອງເພດ
ຍິງ" ຈະຊ່ວຍປະກອບສ່ວນເຮັດໃຫ້ລະບອບອອກແຮງຂອງພວກເຮົາ
ສຳເລັດໄປດ້ວຍດີ.

ລິດາ ເປັນຮອບນາ ຍັງຫນຸ່ມໆຢູ່, ເກືອບເວົ້າໄດ້ວ່າຍັງເປັນ
ເດັກນ້ອຍຢູ່ເລີຍລະ. ນາງຫາກໍຮຽນຈົບວິທະຍາໄລອອກນາສົດໆ
ຮ້ອນໆ ແລະພໍປານກັບວ່າຫາກໍຊີ້ນອອກຈາກປີກແມ່ນາໃຫມ່ໆ. ຜູ້
ອຳນວຍການພະແນກສຶກສາຖາມຂ້າພະເຈົ້າ ຂະນະທີ່ເຊັນລົງໃສ່ໃບ
ແຕ່ງຕັ້ງຂອງນາງ:

- ເຈົ້າຊິເອົາອີ່ນາງນ້ອຍຄົນນີ້ໄປເຮັດຫຍັງເກາະ? ມັນຊິຮູ້ທີບ
ຫຍັງເດ.

- ຂ້ອຍຕ້ອງການຄົນແນວນີ້ລະ. ເຈົ້າຮູ້ບໍ່, ຍາມໃດຂ້ອຍກໍຄຶດ
ວ່າ, ໃນກໍລະນີຈັ່ງຊັ້, ຄວາມຮູ້ຄວາມສາມາດບໍ່ມີຄວາມສຳຄັນທໍ່
ສົ່ງນີ້ດອກ. ນາງນ້ອຍລິດາ ຄົນນີ້ ຫລືເວົ້າໃຫ້ຖືກແທ້, ແອນ້ອຍ
ຄົນນີ້, ຂ້ອຍມີຄວາມເຊື່ອຫມັ້ນນາງພໍປານກັບເຊື່ອສາຍຕາຕົນເອງ
ພຸ້ນລະ.

- ບໍ່ແມ່ນເຈົ້າຄາດສູງເກີນໄປໂພດແລ້ວບໍ? ເອົາລະ, ໄດ້
ແລ້ວ...

ສ່ວນ ເອົາເຕີຣິນາ ກຣິກໍເຮັບນາ ຊ້ຳກົງກັນຂ້າມ ນາງແມ່ນຄູ
ອາຈຸໂສຜູ້ປາກປຽກນຳການສຶກສອນມາພໍແຮງແລ້ວ. ນາງບໍ່ໄດ້ແກ່
ກ່ວາ ລິດາ ຫລາຍປານໃດດອກ, ແຕ່ ລິດາມັກຈ່ອງບ່າຂອງນາງພໍ

ປາມກັບເດັກນ້ອຍຈ່ອງແມ່ຂອງມັນຢູ່ຈັ່ງຊັ້ນລະ. ຂົນຄ້ອສີດຳເກືອບ ຢາກວ່າ ປາມຄ້ອຜູ້ຊາຍຂີດຜ່ານໃບຫນ້າອັນເຄັ່ງຂຶມແຕ່ງິດງາມຂອງ ນາງ. ນາງຮູ້ວິທີຮັກສາກະໂປງໃຫ້ສະອາດສະອ້ານໄດ້ຢ່າງອັດສະຈັນ ອີ່ຫລີແລະພາຍຫລັງໄດ້ທຳຄວາມຮູ້ຈັກກັບນາງແລ້ວ, ກາລີນາ ອີວາໂນວິດ ກໍສາລະພາບອອກມາໂລດວ່າ:

-ຕ້ອງເລືອກຜູ້ຮ່ວມງານຄືແມ່ຍິງຄົນນີ້, ມັນຈົ່ງຊິໄດ້ເລື່ອງ.

ອັນທີ ສີ ທັນວາ ເດັກນ້ອຍຊຸດທຳອິດຈຳນວນຫົກຄົນ ກຶກສົ່ງ ມາໃຫ້ພວກເຮົາ ແລະພ້ອມກັນນັ້ນ ພວກເຮົາກໍໄດ້ຮັບຊອງແປກປະ ຫລາດທົ່ວໄປຂະໜາດໃຫຍ່ເປີ້ເຈີ້ເກີ່ງຫ້າບ່ອນ. ຊອງດັ່ງກ່າວນັ້ນ "ເອກະສານ" ຂອງພວກເດັກນ້ອຍເຫລົ່ານັ້ນແລ້ວ. ໃນຈຳນວນສີ່ ຄົນພວກເຂົາມີອາຍຸຮອດ ໑໒ ປີ ແລ້ວ. ເພິ່ນສົ່ງມາໃຫ້ພວກເຮົາ ຍ້ອນຕ້ອງໂທດໃຊ້ຊາວຸດທຳການປຸ້ນຈີ້. ອີກສອງຄົນມີອາຍຸອ່ອນ ກ່ວາ, ພວກເຂົາກຶກຕ້ອງຫາຄະດີລັກເຄື່ອງ. ເດັກນ້ອຍເຫລົ່ານີ້ແຕ່ງ ໂຕໂກ້ເກ້: ນຸ່ງສົ້ງທະຫານມ້າ, ໃສ່ເກີບບິດຊົ້ງປູ້ ແລະຫວີຜົມຕາມ ແບບສະໄຫມນິຍົມ. ເປົ່າບໍ່ອອກເລີຍວ່າແມ່ນເດັກນ້ອຍເສຍຄົນ. ພວກເຂົາມີຊື່ດັ່ງນີ້: ຊາໂດຣອບ, ບູຮຸນ, ໂວໂລຄອບ, ແບນຍວກ, ກູດ ແລະ ຕາຣາເນດ.

ພວກເຮົາທຳການຕ້ອນຮັບເດັກນ້ອຍຊຸມນີ້ເປັນຢ່າງດີ. ພວກ ເຮົາໄດ້ລົງມືແຕ່ງອາຫານເຍັ່ນແຊບໆໄວ້ແຕ່ເຊົ້າໆ ແລະເອົ້ອຍລ້ຽງ ກໍສຸບຫມວກຂາວສະອາດປານຫິມະ, ສ່ອງປະກາຍແວວວາວ; ທີ່ ຫ້ອງນອນ, ພວກເຮົາໄດ້ຕັ້ງໂຕະກິນລ້ຽງໃສ່ຢູ່ບ່ອນຫວ່າງຂ້າງຕ່ຽງ; ເກີ່ງວ່າພວກເຮົາຈະບໍ່ມີຜ້າປູໂຕະ ແຕ່ຜ້າປູບ່ອນໃຫມ່ໆ ກໍໃຊ້ແທນ

ກັນໄດ້ເປັນຢ່າງດີ. ຫ້ອງດັ່ງກ່າວໄດ້ກາຍເປັນບ່ອນເຕົ້າໂຮມ ສະມາ
ຊິກທັງຫມົດຂອງນິຄົມທີ່ຫາກໍເກີດນີ້. ການີ ອີວາໂນວິດ ກໍໄດ້ມາ
ຮ່ວມເຊັ່ນກັນ. ເນື່ອງໃນໂອກາດດັ່ງກ່າວ ລາວໄດ້ປ່ຽນເສື້ອທີ່ເຕັມ
ແຕ່ຄາບເປື້ອນນັ້ນມາເປັນເສື້ອໃຫຍ່ແພກໍາມະຍີ່ສິບສອງ.

ຂ້າພະເຈົ້າກ່າວຄໍາປາໄສກ່ຽວກັບຊີວິດໃຫມ່, ຊີວິດທີ່ຕ້ອງອອກ
ແຮງງານ ເຊິ່ງປະເຊີນຫນ້າກັບພວກເຂົານັບແຕ່ວັນນີ້ເປັນຕົ້ນໄປ,
ຂ້າພະເຈົ້າບອກພວກເຂົາວ່າ ຕ້ອງລືມອະດີດ ແລະຈະຕ້ອງກ້າວ
ໄປຂ້າງຫນ້າສະເຫມີ. ພວກນັກຮຽນບໍ່ຟັງຄໍາເວົ້າຂອງຂ້າພະເຈົ້າ
ປານໃດ, ພາກັນຊັບຊຶມຄວາມນ້ອຍຕໍ່ກັນ ແລະກົ້ມແສງຕາແບບ
ຫມິ່ນປະຫມາດ ຕິດຕາມດ້ວຍຮອຍຍິ້ມເບະໆແບບເຍາะເຍີ້ຍໃສ່ກັນ
ແກວ່ນນອນອ່ອນນວມ, ຜ້າຝ້າຫນຸ່ນອ່າວເກົ່າ ແລະຝ້າຜັກຕຸ
ບ່ອງຍັງມທີ່ທາສີແລ້ວໃຫມ່ໆນັ້ນ. ເມື່ອຂ້າພະເຈົ້າກ່າວຄໍາປາໄສໄດ້
ຮອດເຄິ່ງຫນຶ່ງ, ຊາໂດຮອບ ກໍເວົ້າຂຶ້ນແຮງໆກັບຫມູ່ຂອງເຂົາຄົນ
ຫນຶ່ງວ່າ:

- ແມ່ນມຶ້ງນີ້ແລ້ວພາພວກກູມາຕົກບວກນ້ໍາອ້ອຍບ່ອນນີ້!

ຫລັງຈາກນັ້ນ ພວກເຮົາໃຊ້ເວລາທັງຫມົດຢູ່ກັບການວາງແຜນ
ໃຫ້ແກ່ອະນາຄົດ ແຕ່ພວກເຂົາຊໍ້າສະແດງຄວາມສົນໃຈແບບຜິວເຜີນ
ຕາມມາລະຍາດ ຕໍ່ຂໍ້ສະເຫນີທັງຫລາຍຂອງຂ້າພະເຈົ້າ ແລະພາກັນ
ຄຶດຫາແຕ່ວິທີຫລົບຫນີຈາກຂ້າພະເຈົ້າໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້
ເທົ່ານັ້ນ.

ເຊົ້າມື້ຕໍ່ມາ ລິດາ ເປຕຣອບນາ ມາຫາຂ້າພະເຈົ້າດ້ວຍທ່າທີຕົກ
ໃຈ. ນາງບອກວ່າ:

- ຂ້ອຍບໍ່ຮູ້ຊິເວົ້ານຳພວກເຂົາແນວໃດ... ຂ້ອຍບອກເຂົາວ່າ : ຕ້ອງໄປຕັກນ້ຳມາແຕ່ຫນອງ, ແລ້ວຫມໍຫນຶ່ງຜູ້ຈ່ຳຜິມແບບນັ້ນຫັ້ນ ເກາະ, ມັນກຳລັງໃສ່ເກີບໂບກຢູ່ ໂລດເອົາສົ້ນເກີບຈ້ີໃສ່ເກືອບກືກ ຫນ້າຂ້ອຍ ທັງເວົ້າວ່າ: "ເຫັນບໍ່ນີ້ຊ່າງເກີບເຮັດມັນນ້ອຍໂພດ!"

ໃນຊຸມມື້ທຳອິດ ພວກເຂົາພະຍາຍາມອົດກັ້ນບໍ່ສະແດງວ່າຫນຶ່ນ ປະຫມາດພວກເຮົາ ແຕ່ຫາກເຮັດຄືວ່າບໍ່ມີພວກເຮົາຢູ່ຫັ້ນຊ່ຶ. ໃນ ຕອນແລງພວກເຂົາຫາຍຫນ້າໄປຈາກນິຄົມຢ່າງກືສຶດ ແລະຫວນກັບ ມາໃນຕອນເຊ້ົາ ຕ້ອນຮັບຄຳຕັກເຕືອນເຊ່ືງຂ້າພະເຈ້ົາເວົ້າໂດຍຕັ້ງໃຈ ໃຫ້ເປັນ "ການສຶກສາອົບຮົມທາງສັງຄົມ" ຢ່າງເປັນທາງການອ້ອຍ ຕ້ອຍນັ້ນ ດ້ວຍຮອຍຍ້ົມແບບປິດໆບ້ັງໆ. ພໍອາທິດຫນຶ່ງ, ເຈ້ົາຫນ້າ ທ່ີຕຳຫລວດຍຸຕິທຳຄົນຫນ່ຶງ ກໍມາຈັບແບນຍອກໃນຂ້ໍຫາທຳການ ຄາດຕະກຳກາງຄືນແລະງັດແງ. ລິດາ ເປຕຣອບນາ ສັ່ນເຊັນດ້ວຍ ຄວາມຢ້ານ, ນາງສະອ້ຶນໄຫ້ລ້ີຢູ່ໃນຫ້ອງນອນແລະອອກມາກໍພໍພຈ ແຕ່ກາມທຸຫຄົນວ່າ :

- ແລ້ວມັນແມ່ນຫຍັງກັນລະນ້ີ? ເປັນໄປໄດ້ແທ້ໆຫວະ? ມັນ ອອກໄປແລ້ວກະຂ້ຳຄືນ ຈັ່ງຊ້ີນະ?

ເອີກາເຕີຣີນາ ກຣິກໍເຣັບນາ ຢູ່ຫ້ວຄ້ືວເຂ້ົ້າກັນ ແລະເວົ້າດ້ວຍ ຮອຍຍ້ົມຂຶມໆວ່າ :

- ອານໂຕນ ເຊມີອໂນວິດ ເວົ້າແທ້ໆໃດ ຂ້ອຍບໍ່ຮູ້ເລີຍ...ບາງ ທີຂ້ອຍຄິດວ່າຫນີໄປເສຍອາດຈະດີກ່ວາ...ຂ້ອຍບໍ່ຮູ້ວ່າ ຈະວາງທ່າທີ ຢູ່ຫນ້ີແບບໃດແລ້ວ...

ປ່າປ່ຽວອ້ອມຮອບນິຄົມ ເຄຫາສະຖານຮູບສ່ີຫລ່ຽມກ້ອນທ່ີເປ່ົາ

ແປນ, ຕຽງໄມ້ສິບກ່ວາຫນ່ວຍ, ຂວານແລະສຽມທັງຫມົດນີ້ປະ ກອບເປັນອັດງຸປະກອນຂອງພວກເຮົາ ພ້ອມດ້ວຍນັກຮຽນ ຝ ຄົນທີ່ ບໍ່ພຽງແຕ່ປະຕິເສດຫລັກການວິຊາຄູຂອງພວກເຮົາເທົ່ານັ້ນ ແຕ່ຍັງ ປະຕິເສດອະລິຍະທຳທຸກຮູບແບບນຳ. ທຸກສິ່ງທຸກຢ່າງເຫລົ່ານີ້ ຊ່າງ ບໍ່ສອດຄ່ອງກັບປະສົບການ ທີ່ພວກເຮົາໄດ້ຮຽນຮູ້ຢູ່ໃນໂຮງຮຽນຈັກ ຫນ້ອຍເລີຍ.

ເວລາແລງຄ້ອຍຄ່ຳ ອັນຍືດຍາວໃນລະດູຫນາວງຽບເຫງົາສົນ ຄວນ. ຢູ່ພາຍໃນບໍລິເວນນິຄົມມີຕະກຽງນ້ຳມັນກ໊າດນ້ອຍໆໃຕ້ໃຫ້ແສງ ສະຫວ່າງຢູ່ແຕ່ສອງຫນ່ວຍ, ຫນ່ວຍຫນຶ່ງຫ້ອຍຢູ່ຫ້ອນອນ ແລະອີກ ຫນ່ວຍຫນຶ່ງຢູ່ໃນຫ້ອງຂ້າພະເຈົ້າ. ສາວນາງຄູທັງສອງກັບ ກາລິນາ ອິວາໂນວິດ ມີ ຕະກຽງເຕົ້າຫົນ ພະລຶດຕະພັນສະໄຫມພະເຈົ້າກີ ຈະແລັກ ແລະຄໍຣິບ ຜູ້ສະກຳປະນານະຄອນ ກຽບຕາມຕຳນານ. ຄໍ ໂຄມແກ້ວຕະກຽງຂອງຂ້າພະເຈົ້າແຕກຫັກໄປແລ້ວ ແລະພາກສ່ວນ ທີ່ເຫລືອຂອງມັນກໍໂອບຄ້ອນດຳກຸ້ມ ເພາະວ່າ ກາລິນາ ອິວາໂນວິດ ຜູ້ນັກມາຕໍ່ໄຟໃສ່ກອກຂອງລາວ ເປັນປະຈຳຢູ່ໃນຫ້ອງຂ້າພະເຈົ້ານັ້ນ ໄດ້ເອົາເຈ້ຍຫນັງສືພິມຍັດເຂົ້າໃສ່ມັນຕັ້ງເຄິ່ງສະບັບ ເພື່ອລາວຈະໄດ້ ຕໍ່ໄຟສະດວກ.

ປີນີ້ລະດູຫນາວມາຮອດອ່າວໄວແດ່, ເດີ່ນໂຮງຮຽນຈົມຢູ່ພາຍ ໃຕ້ກອງຫິມະ ແລະບໍ່ມີໃຜຈັກຄົນປັດກວາດຫິມະອອກຈາກທາງຍ່າງ. ຂ້າພະເຈົ້າບອກໃຫ້ພວກນັກຮຽນເຮັດ ແຕ່ ຊາໂດຮອບຕອບວ່າ:

- ໃຫ້ກວາດກໍໄດ້ ແຕ່ຕ້ອງລໍຖ້າທ້າຍລະດູຫນາວກ່ອນ ເພາະວ່າ ຖ້າເຮັດດຽວນີ້ຫິມະຍັງຊິຕົກລົງມາອີກຢູ່, ເຂົ້າໃຈລະຕິ?

ດ້ວຍຮອຍຍິ້ມຫນ້າຮັກ ມັນຍ່າງຫນີຈາກຂ້າພະເຈົ້າໄປຫາຫມູ່ ຂອງມັນ, ເຮັດຄືລືມວ່າບໍ່ມີຂ້າພະເຈົ້າຢູ່ຫັ້ນ. ຊາໂດຮອບ ມາຈາກ ຄອບຄົວທີ່ມີວັດທະນະທໍາຢູ່ສິ່ງດ້ງກ່າວແມ່ນເຫັນໄດ້ໃນທັນທີ. ເຂົາ ເວົ້າຈາຢ່າງຖືກຕ້ອງ ແລະສີຫນ້າຂອງເຂົາແຕກຕ່າງຈາກຫມູ່ ຄືມີ ເນື້ອຜິວອ່ອນບາງອັນເປັນລັກສະນະສະເພາະຂອງພວກເດັກນ້ອຍທີ່ຢູ່ ຄືກັນດີເທົ່ານັ້ນ. ໂອໂລຄອບ ນັ້ນເປັນອີກປະເພດຫນຶ່ງ: ປາກ ກ້ວາງ ດັ້ງເປ ຕາຕີ່ນຕໍ່ໂຫ້ໂລ້ ມີກ້າມຊີ້ນເປັນກ້ອນແຂງແຮງ...ລັກ ສະນະໂຈນອ້ອຍຕ້ອຍ. ມັນບໍ່ເອົາມືອອກຈາກກ້ຽວຈັກເທື່ອ ແລະ ເມື່ອມັນຍ່າງມາຫາຂ້າພະເຈົ້າ ມັນກໍວ່າງທ່າແບບນີ້.

- ຈັ່ງໃດ, ເຂົາບອກເຈົ້າວ່າ...

ຂ້າພະເຈົ້າຍ່າງຫນີຈາກຫໍນອນ ຮູ້ສຶກຄືກັບວ່າມີກ້ອນຫີນຫນັກໆ ກ້ອນຫນຶ່ງທັບຢູ່ເທິງຫນ້າເອິກມັນແມ່ນນ້ໍາຫນັກຂອງຄວາມໂມໂຫ ທີ່ຂ້າພະເຈົ້າອົດກັ້ນໄວ້ນັ້ນເອງ. ແຕ່ເຖິງຢ່າງໃດ ມັນຈໍາເປັນທີ່ຈະ ຕ້ອງກວາດທາງຍ່າງ ແລະຄວາມໂມໂຫແບບແຂງກະດ້າງກໍຮຽກຮ້ອງ ໃຫ້ມີການສະແດງອອກ ຂ້າພະເຈົ້າເຂົ້າໄປຫາ ກາລິນາ ອີວາໂນວິດ:

- ໄປຊິນຫໍມະອອກນໍາກັນໄປ໋.

- ແມ່ນເຈົ້າເວົ້າຫຍັງເກາະ! ເຈົ້າຄຶດວ່າຂ້ອຍມາສະຫມັກເຮັດ ວຽກກຸລີຊັ້ນຫວາ! ແລ້ວພວກນັ້ນເດ້? - ລາວງຶກຫົວໄປທາງຫໍ ພັກ, - ພວກນັກໂຈນຂອງພວກເຮົາຫັ້ນເດ້?

- ພວກເຂົາບໍ່ຢາກເຮັດ.

- ໂທ້...ພວກຜາກເອີ້ຍ! ເອົາລະຄັນວ່າເປັນແນວນີ້ ໄປກະໄປ!

ກາລິນາ ອີວາໂນວິດ ກັບຂ້າພະເຈົ້າປັດຫໍມະອອກຈາກທາງຍ່າງ

ເສັ້ນຫນ້ຳແລ້ວຮຽບຮ້ອຍ, ໂອໂລຄອບ ກັບ ຕາຮາແນດ ກໍຍ່າງ ອອກມາຕາມທາງນີ້ ເພື່ອເຂົ້າໄປໃນເມືອງຄືຕາມປົກກະຕິຂອງພວກ ເຂົາ.

- ເຮັດແນວນີ້ກໍດີໃດເນາະ! - ຕາຮາແນດ ເວົ້າຂຶ້ນຢ່າງເບີກ ບານ.

- ຄວນຊິເຮັດແບບນີ້ແຕ່ດົນແລ້ວນ່າ, - ໂອໂລຄອບ ເວົ້າສະ ຫນັບສະຫນຸນ.

ກາລີນາ ອີວາໂນວິດ ຕັນທາງພວກເຂົາໄວ້:

- ແມ່ນຫຍັງເກາະ ນຶ່ງວ່າເຮັດແນວນີ້ກໍດີຊັ້ນຫວະ? ບັກຂີ້ຕູດ, ນຶ່ງປະຕິເສດບໍ່ເຮັດວຽກແລ້ວນຶ່ງຄິດວ່າກູຊິເຮັດແທນນຶ່ງຊັ້ນຫວາ? ນຶ່ງບໍ່ຕ້ອງມາຍ່າງຢູ່ທາງນີ້! ໄປ...ໄປຍ່ຳຫີມະພຸ້ນບໍ່ຊັ້ນກິນດ້ານ ຊ້ານກູຫນີ!

ກາລີນາ ອີວາໂນວິດ ປົ່ນອາວຸດໃນມືໄປມາ ແຕ່ໃນຊ່ວພິບຕາ ດວງເທົ່ານັ້ນ ອາວຸດດັ່ງກ່າວປົວອອກຈາກມືລາວໄປຕົກໃສ່ກອງຫີມະ ອ່າວໄກກອງຫນ້ຳ, ກອກຖຸດຟ້ຳຈາກປາກໄປຕົກອີກຟາກຫນ້ຳສ່ວນ ຜູ້ເປັນເຈົ້າຂອງກໍຕົກຂະນ່າ ອ້າປາກຄ້າງ ໄດ້ແຕ່ແນມນຳຫມູ່ບ່າວ ນ້ອຍຫມູ່ນັ້ນລ້າງ ແລະໄດ້ຍິນສຽງຫົວປົນສຽງຮ້ອງ ທ້ຳມາໃສ່ວ່າ:

- ໄປຊອກເອົາເດີ ຊ້ານເຈົ້ານະ ເກົ້າເອີ!

ຈາກນັ້ນພວກເຂົາຈ່ຳຍ່າງມຸ່ງຫນ້າໄປທາງໃນເມືອງທ້ຳຫົວ.

- ໃຫ້ກູໄປຕາຍທາງໃດ ກູກໍຍິນຍອມໄປດີກ່ວາເຮັດວຽກຢູ່ຫນີ!- ກາລີນາ ອີວາໂນວິດ ເວົ້າຂຶ້ນແລ້ວກໍຍ່າງກັບຄືນຫ້ຳພັກ ປະຊ້ານ ກົ້ມໄວ້ເທິງກອງຫີມະ.

ຊີວິດຂອງພວກເຮົາເປັນຫນ້າເບື່ອຫນ່າຍ ແລະຫນ້າຢ້ານຫລາຍຂຶ້ນ. ທຸກແລ້ງພວກເຮົາໄດ້ຍິນສຽງຮ້ອງມາຈາກກະຫນົງສາຍ ຄາຄົບ ວ່າ:

- ຈ່ອຍແດ່!

ພວກໄທບ້ານ ທີ່ກຶກຂະໂມຍໄປກັດໄວ້ເຮືອນຈານພາກັນມາຫາພວກເຮົາ, ດ້ວຍນ້ຳສຽງອ້ອນວອນຫນ້າສົງສານ ພວກເຂົາເຮັດຮ້ອງໃຫ້ພວກເຮົາເຮັດແນວໃດແນວຫນຶ່ງ.

ຂ້າພະເຈົ້າຂໍປຶ້ນສັ້ນກະບອກຫນຶ່ງ ນຳຜູ້ອຳນວຍການພະແນກສຶກສາປະຈຳຈິວ ໂດຍອ້າງວ່າເພື່ອປ້ອງກັນຕົວເອງ ແລະສູ້ກັບພວກອັດສະວິນຂີ້ລັກ ແລະໄດ້ປົດບ້ຳສະພາບການນິຄົມ ບໍ່ໃຫ້ເພີ່ນຮູ້ນຳ. ຂ້າພະເຈົ້າຍັງບໍ່ສູນເສຍຄວາມຫວັງທີ່ຈະຄົ້ນພົບວິທີທາງເຂົ້າເກົ່ງຈິດໃຈກັບພວກນັກຮຽນປະຈຳເທື່ອ.

ໃນຊຸມເດືອນທຳອິດນີ້ ພວກເຮົາບໍ່ພຽງແຕ່ເປັນລະຍະທ້ຳກ່ອຍໄຮ້ຫວັງ ແລະການເຄັ່ງຂຶມທີ່ໄຮ້ພະລັງສຳລັບຕົວຂ້າພະເຈົ້າເອງ ແລະນິດສະຫາຍອື່ນເທົ່ານັ້ນ ແຕ່ຍັງແມ່ນຍຸກສະແຫວງຫາສັດຈະທຳນຳອີກ. ຕະຫລອດຊີວິດຂ້າພະເຈົ້າບໍ່ເຄີຍອ່ານປຶ້ມກ່ຽວກັບວິຊາຄູຫລາຍເທົ່າກັບທີ່ໄດ້ອ່ານລະຫວ່າງລະດູຫນາວປີ ໑໙໔໐ ນີ້ເລີຍ.

ເວລານັ້ນແມ່ນສະໄຫມຂອງ ວຣັງແກນ ແລະການແຊກແຊງຂອງພວກໂປໂລຍ. ວຣັງແກນ ມາວິນວຽນຢູ່ອ້ອມແອ້ມແຖວນັ້ນ ຄືຢູ່ໃນເຂດ ໂນໂວມີໂກຣດ ແລະຢູ່ບໍ່ໄກຈາກພວກເຮົາເທົ່າໃດທີ່ ແຈກກາດຊີ ນັ້ນ ພວກໂປໂລຍກໍກຳລັງເຄື່ອນໄຫວຢູ່, ພວກຫົວຫນ້າຊຸມໂຈນທ່ອງທ່ຽວຢູ່ທົ່ວ ອູກຣາອິນ ສ່ວນຜົນທຸງສີເຫລືອງ

ແກມຟ້າຂອງ ປດລູຣາ ກໍຫາກມີສະເຫນດູດດຶງເອົາຜູ້ຄົນໄປຢູ່ອ້ອມ
ຂ້າງນັ້ນຫລາຍຢູ່. ແຕ່ວ່າພວກເຮົາ ຜູ້ຢູ່ໃນປ່າເລິກພີ້ ພາກັນເອົາມື
ທ້າງສອງກຸມຫົວ ແລ້ວກໍພະຍາຍາມລືມສິ່ງລະເບີດຈາກເຫດການ
ໃຫຍ່ໆເຫລົ່ານັ້ນເສຍ, ພວກເຮົາພາກັນອ່ານປຶ້ມວິຊາຄູ.

ຜົນກຳໄລຕົ້ນຕໍທີ່ຂ້າພະເຈົ້າໄດ້ຈາກການອ່ານເຫລົ່ານີ້ ແມ່ນ
ຄວາມເຊື່ອຫມັ້ນທີ່ລອກຄາບມາເປັນຄວາມແນ່ໃຈໃນທັນທີ ນັ້ນກໍຄື
ວ່າ ການອ່ານເຫລົ່ານີ້ບໍ່ໄດ້ໂຍນວິທະຍາສາດ ຫລື ທິດສະດີໃດສູ່ມື
ຂ້າພະເຈົ້າເລີຍ ແລະກໍຕ້ອງກອດກອນເອົາທິດສະດີໃດຫນຶ່ງຈາກຜົນ
ລວມຂອງຜາກົດການຕົວຈິງທີ່ເກີດຂຶ້ນຕໍ່ຫນ້າຕໍ່ຕາເອົາເອງ. ທຳອິດ
ຂ້າພະເຈົ້າບໍ່ເຂົ້າໃຈຜາກົດການນັ້ນດອກ ພຽງແຕ່ເຫັນມັນຊື່ໆ: ຂ້າ
ພະເຈົ້າບໍ່ຮູ້ຈັກວ່າຕ້ອງເຮັດແນວໃດກັບແບບຕັ້ງຈາກຕຳລາທ້າງຫລາຍ
ເລີຍ, ໃນເມື່ອວ່າຢ່າງໃດກໍຕາມ ຂ້າພະເຈົ້າບໍ່ສາມາດຫມູນໃຊ້ມັນ
ເຂົ້າຕົວຈິງ ແຕ່ຂ້າພະເຈົ້າຕ້ອງການວິໄຈໃນທັນທີແລະລົງມືທັນທີຄື
ກັນ.

ຂ້າພະເຈົ້າຮູ້ສຶກໃນຕົວເອງວ່າ ເກົ່ງເວລາຮຽບຮ້ອນແລ້ວ ແລະ
ຂ້າພະເຈົ້າກໍບໍ່ອາດລັກລ້າໄປແມ່ນແຕ່ນ້ຶດງວ. ນິຄົມນັບມື້ນັບເປັນ
ເຮືອນຮ້າບ່ອນລີ້ລ່ອນຕົວຂອງຊຸມໂຈນຫລາຍຂຶ້ນ. ໃນການພົວພັນ
ລະຫວ່າງນັກຮຽນກັບຜູ້ອົບຮົມນັ້ນ ພວກເດັກນ້ອຍເປັນຝ່າຍມີໂອ
ກາດເຍາະເຍີ້ຍສົ່ງຄວາມສົ່ພວກເຮົາຕະຫລອດເວລາສະເຫມີ ທ້າງສະແດງ
ວາດທ່ານັກເລງອອກມາຢ່າງເປີດເຜີຍ. ພວກເຂົາເລີ່ມພາກັນທ້າງເຫ
ເລ່ືອງຕະຫລົກແບບລາມົກໃສ່ຕໍ່ຫນ້າພວກເອ້ຍຄູ, ສັ່ງເອົາຂອງ
ກິນດ້ວຍກ້ອຍຄຳຫຍາບຊ້າ ແລະຢູ່ໂຮງອາຫານກໍຊັດກ້ວຍຈານໃສ່

ກັນ. ພວກເຂົາສືບຖາມຂໍແບ່ງກິດກອກຢາ ເຊິ່ງຜູ້ໃດຜູ້ຫນຶ່ງມີຢູ່ ດ້ວຍທ່າທີຢອກເຍີ້ຍ ທັ້ງເອົາມືດັ່ງແຫລມອອກມາຫລິ້ນຢ່າງເປີດ ເຜີຍ.

- ອັນນີ້ອາດຊິເປັນປະໂຫຍດກໍໄດ້ເດ້ ເຈົ້າຮູ້ບໍ່ໃນຍາມອັດຕະຄັດ ນະ...

ພວກເຂົາປະຕິເສດບໍ່ໄປຕັດໄມ້ມາເຮັດຟືນດັ່ງໃສ່ເຕົາຝີງຢ່າງເດັດ ດ່ວ ແລະຢູ່ຕໍ່ຫນ້າຕໍ່ຕາກາລິນາ ອີວາໂນວິດ ແທ້ໆພວກເຂົາພາກັນ ມ້າງຫລ້ຄາໂຮງກວນ ສິ້ງດັ່ງກ່າວເຮັດໄປແບບຢອກກັນຫລິ້ນ ທ່າມກາງສຽງຫົວລັ້ນ:

- ທໍ່ນີ້ກໍພໍສໍາລັບທີ່ພວກເຮົາຈະຢູ່ຫນີ້ແລ້ວລະ!

ກາລິນາ ອີວາໂນວິດ ດຸດກອກແຮງຈົນມີຫມັດໄຟແຕກມາບໆ ອອກມາ ລາວວາແຂນອອກແລ້ວເວົ້າວ່າ:

- ເຈົ້າຊິເວົ້າອີ່ຫຍັງກັບພວກມັນໄດ້ ພວກຜາກຫມູ້ນີ້ຮ? ເບິ່ງ ແມ້ພວກອາດຍານ້ອຍຫມູ່ນີ້ນະ! ແລ້ວພວກມັນແອບມັນຮຽນມາແຕ່ ໃສ ເລື່ອງມ້າງເລື່ອງເພເຮືອນຊານແນວນີ້. ຕ້ອງເອົາພໍ່ເອົາແມ່ມັນ ຟຸ້ນບ່າໄປຍັດໃສ່ຄຸກນະ, ພວກອັບປີ...ຜາກສັງຄົມ.

ແລະແລ້ວຄວາມມະຫັດສະຈັນກໍເກີດຂຶ້ນ: ຂ້າພະເຈົ້າແກ້ເຊືອກ ຜູກຫລັກວິຊາຄູກໍ້ມທັນທີ.

ເຊົ້ານີ້ຫນຶ່ງໃນລະດູຫນາວ. ຂ້າພະເຈົ້າບອກ ຊາໂດຣອບ ໄປ ຕັດໄມ້ໃນປ່າມາເຮັດຟືນສໍາລັບເຮືອນຄົວ. ຂ້າພະເຈົ້າໄດ້ຍິນຄໍາຕອບ ແບບເກົ່າຂອງມັນວ່າ:

- ໂຕກະໄປເອງເທາະແມ້, ໂຕພໍໃຈນໍາບ່ອນນີ້ເດ້!

ນັບວ່າເປັນເທື່ອທຳອິດທີ່ມັນເອີ້ນຂ້າພະເຈົ້າວ່າ "ໂຕ".

ເປັນການຫມິ້ນປະຫມາດເກີນໄປແລ້ວ, ຄວາມໂມໂຫໄຮ້ສະຕິ ຈາກປະສົບການໃນທຸກໆເດືອນຜ່ານມາ ຊຸກດັນໃຫ້ຂ້າພະເຈົ້າເກີງ ຂັ້ນເຕົ້ອກຳປັ້ນຂຶ້ນ ແລະຟາດຫນ້າ ຊາໂດຍອບ ບາດຫນຶ່ງ. ບາດ ກຳປັ້ນຄົງຮຸນແຮງສົມຄວນເພາະມັນຍືນຈ້ຳບໍ່ຢູ່ ລົ້ມອາບຟາບລົງໃສ່ ເຕົ້ຝົ້ງ. ຂ້າພະເຈົ້າຕົ້ມັນອີກເທື່ອຫນຶ່ງ ດົ້ງຄໍເສື້ອມັນຂຶ້ນມາ ແລະ ຟາດມັນອີກເປັນບາດທີສາມ.

ຂ້າພະເຈົ້າເຫັນວ່າມັນຢ້ານຂຶ້ນມາໃນທັນທີ ທົ້ງໆທີ່ຫນ້າເນົ້ົ ບໍ່ມີສີເລືອດເລີຍ ມັນຍັງແປງຫນອກເງົ້ບດ້ວຍມືສັ່ນໆ ກອດຫນອກ ອອກແລ້ວໃສ່ຄືນໃຫມ່ ຂ້າພະເຈົ້າເຮັດຄືຈະຕົ້ມັນອີກແທ້ໆ ແຕ່ມັນ ຈົ່ມຄ່ອຍໆບົ່ນຄາງອຸ່ນໆວ່າ:

-ຂໍໂທດ, ອານໂຕນ ເຊມີອໂນວິດ.

ຂ້າພະເຈົ້າຕົກເປັນເຫຍື່ອຂອງຄວາມໂມໂຫຮ້າຍກາດ ແລະບໍ່ມີ ຂອບເຂດ ຈົນໂຕເອງຮູ້ສຶກໄດ້ວ່າ ເວລານັ້ນຖ້າມີຜູ້ໃດຜູ້ຫນຶ່ງກ່ຽວ ຂັ້ນຈັກຄວາມ ຂ້າພະເຈົ້າຄົງຈະໂດດຄັ້ນຄໍພວກມັນຫມົດທຸກຄົນ ທຳ ລາຍສາຍໂຈນຫມູ່ນີ້ໃຫ້ຫມົດກ້ຽງໄປ ເຫລັກເຂ່ຍກ່ານອັນຫນຶ່ງຕົກ ຢູ່ໃນກຳມືຂອງຂ້າພະເຈົ້າ, ພວກມັນອີກຫ້າຄົນຢືນຢູ່ໃກ້ໆຕ່ຽງບໍ່ປາກ ຈັກຄວາມ ບູຮຸນ ຟ້າວແປງທ່າທີໃຫມ່.

ຂ້າພະເຈົ້າຫັນໄປຫາພວກເຂົາ ແລະເອົາເຫລັກເຂ່ຍກ່ານຟາດ ໃສ່ຂອບຕ່ຽງ:

-ຫມົດທຸກຄົນອອກໄປປ່າດ່ຽວນີ້, ເຮັດ່ຽກ? ບໍ່ຊັ້ນ ສຸຊິໄປ ຕາຍຫ່າທ່ຽງໃດກະໄປ...!

ຈາກນັ້ນຂ້າພະເຈົ້າກໍອອກຈາກຫ້ອນ. ເມື່ອກາຍມາທາງໂຮງ ກວມບ່ອນເກັບມ້ຽນເຄື່ອງມືອຸປະກອນນັ້ນ ຂ້າພະເຈົ້າຍົບເອົາຂວານ ດວງຫນຶ່ງ ທັງສັງເກດເບິ່ງພວກນັກຮຽນຈັບເອົາຂວານແລະເລື່ອຍ ດ້ວຍໃຈຫົດຫູ່. ໃນທັນໃດຂ້າພະເຈົ້າກໍຄຶດອອກວ່າ ທາງທີ່ດີແລ້ວບໍ່ ຄວນໃຫ້ພວກເຂົາຕັດຟືນໃນມື້ນີ້ເລີຍ ທັງນີ້ເພື່ອບໍ່ໃຫ້ພວກເຂົາມີ ອາວຸດຢູ່ໃນມື ແຕ່ວ່າທຸກຢ່າງຊ້າເກີນໄປສາແລ້ວ: ພວກເຂົາຈັບ ເອົາທຸກຢ່າງທີ່ຕ້ອງການແລ້ວຮຽບຮ້ອຍ. ຊ່າງເທາະ! ຂ້າພະເຈົ້າ ກວມພ້ອມແລ້ວທີ່ຈະຂາຍຊີວິດຕົນເອງໃຫ້ພວກເຂົາຢ່າງແພງໆ ຂ້າ ພະເຈົ້າຍັງມີປືນສັ້ນກະບອກຫນຶ່ງຢູ່ໃນກົງ.

ພວກເຮົາພາກັນອອກເດີນທາງ. ກາລີນາ ອິວາໂນວິດ ຍ່າງມາ ຫາຂ້າພະເຈົ້າ ແລະຊຶ່ມກາມດ້ວຍທ່າທີຮ້ອນໃຈວ່າ:

- ນີ້ຫມາຍຄວາມວ່າແນວໃດ? ພ້າເອີ ບອກໃຫ້ຂ້ອຍຮູ້ນຳແດ່ ວ່າເປັນຫຍັງມື້ນີ້ພວກເຂົາຄືຄຳຮູ້ແທ້?

ຂ້າພະເຈົ້າແນມເບິ່ງຕາຄູ່ສີຟ້າຂອງເທບພະເຈົ້າ "ປັນ" ດ້ວຍທ່າ ທີເສີຍໆແລ້ວເວົ້າວ່າ:

- ເລື່ອງບໍ່ຈິບປານໃດ... ນັບວ່າເປັນເທື່ອທຳອິດໃນຊີວິດທີ່ຂ້ອຍ ຕີຄົນ.

- ຕາຍ! ເວນກຳແລ້ວ! - ກາລີນາ ອິວາໂນວິດ ອຸທານອອກ ມາ, - ແລ້ວບາດຫ່າມັນໄປພ້ອງຫັ້ນເດ້?

- ສຳລັບເລື່ອງນີ້ບໍ່ເປັນຫຍັງດອກ...

ແຕ່ແລ້ວທຸກຢ່າງຊ້ຳດຳເນີນໄປຢ່າງດີ ຈົນຂ້າພະເຈົ້າແປກໃຈ. ຂ້າພະເຈົ້າເຮັດວຽກຢູ່ກັບພວກເຂົາຈົນຮອດເວລາກິນເຂົ້າ ພວກເຮົາ

ພັນລຳຕົ້ນແປກທີ່ຄົດງໍຢູ່ໃນປ່າ ເກິງແມ່ນພວກເຂົາອາລົມບໍ່ດີກໍຕາມ ແຕ່ອາກາດບໍລິສຸດເຍືອກເຢັນ ຄວາມງາມຂອງປ່າ ປະກອບດ້ວຍຕົ້ນໄມ້ງ່າໂອບດ້ວຍຍອງຫີມະເປັນເກີບໆ ແລະສຽງບັນເລງຂອງເລື່ອຍກັບຂວານກໍສະແດງລິດຂອງມັນອອກມາ.

ໃນເວລາພັກຜ່ອນ ພວກເຮົາດູດຢາແບບຢາກວ່າ ບໍ່ປອດໂປ່ງໃຈຫລາຍກ່ວາ, ຂ້າພະເຈົ້າເລັ່ມເສັ້ນຢາປຸກຈອກຈາກກິ່ງຈົນຫມົດກ້ານ ແລະຂະນະທີ່ທ່ຽງຄັນຢາໃຫ້ບີວລອຍຂຶ້ນໄປຫາປາຍໄມ້ພຸ້ມ ຊາໂດຣອບ ກໍຫົວກ້ຽງຂຶ້ນແຮງໆໂລດ.

-ອ່າ ກະຄັກຢູ່ໃກ໋ນ້ໍ ຮະ ຮະ ຮະ!

ໃບຫນ້າອິ່ມເຕັ່ມແດງອົ່ງຕົ່ງ ເຕັ່ມໄປດ້ວຍຮອຍຍິ້ມນັ້ນ ເປັນຕາເບິ່ງບໍ່ຫນ້ອຍ ແລະຂ້າພະເຈົ້າກໍບໍ່ອາດຕອບໂຕ້ມັນໄດ້ ນອກຈາກຍິ້ມຢ່າງດຽວ.

-ແມ່ນອີ່ຫຍັງຄັກ? ການອອກແຮງງານຫວະ?

-ການອອກແຮງງານຫັ້ນກໍເລື່ອງຫນ໋ໍ...ແຕ່ວ່າ...ທີ່ເຈົ້າຟາດຂ້ອຍນັ້ນຕ໊ີ!

ຊາໂດຣອບ ເປັນຊາຍຫນຸ່ມຮ່າງກ໊ືດໃຫຍ່ເຂັ້ມແຂງ, ມີເລື່ອງສຳລັບຫ້ວຍຢູ່ສະເຫມີ ແລະ ຂ້າພະເຈົ້າເອງກໍຕົ່ນຕົ່ນເອງຄ໊ືກັນ ທີ່ໄດ້ຕັດສິນໃຈແຕະຕ້ອງຄົນທີ່ແຮງກ໊ືດແບບນ໊ີ.

ມັນຍັງຫ້ວແຮງໆຈ່ຳຊ້ັນອີກຕ່ໍໄປ ແລະເມ່ືອຍິບເອົາຂວານຍ່າງກ້ຽງໄປຫາຕົ້ນໄມ້ກໍຍັງຫ້ວຢູ່.

-ຮະ ຮະ ຮະ...ເລື່ອງຕາຍໆ...

ພວກເຮົາກິນເຂົ້າຮ່ວມກັນຢ່າງແຊບນ້ໍ ທ້ັງເວົ້າເລື່ອງຕະຫລົກ

ສູ້ກັນພ້ອງ ໂດຍບໍ່ກ່າວເຖິງອຸບັດເຫດໃນຕອນເຊົ້ານີ້ເລຍ. ຂ້າພະ
ເຈົ້ານັ້ນຍັງບໍ່ແຈ້ງໃຈໃນຕົນເອງ ແຕ່ຢ່າງໃດກໍຕາມຂ້າພະເຈົ້າຕັດສິນ
ໃຈແລ້ວວ່າ ຈະບໍ່ອ່ອນສຍງລົງ, ຫລັງຈາກກິນເຂົ້າແລ້ວ ຂ້າພະເຈົ້າ
ກໍອອກຄຳສັ່ງຢ່າງຫນັກແຫນ້ນ: ໂອໂລຄອບ ຍົ້ມແບບຫນ້າ
ດ້ານ ແຕ່ຊາໂດຣອບ ຫຍັບມາຫາຂ້າພະເຈົ້າດ້ວຍທ່າທາງເຄັ່ງຂຶມຈົງ
ຈັງທີ່ສຸດ ແລ້ວເວົ້າວ່າ:

-ພວກເຮົາກະບໍ່ຊ່ວຍປານໃດດອກ, ອານໂຕນ ເຊມືອໂນວິດ!
ທຸກຢ່າງຈະຮຽບຮ້ອຍດອກ, ພວກເຮົາເຂົ້າໃຈແລ້ວ.

ບົດທີ ສິ

ຄວາມຕ້ອງການອັນພື້ນຖານຂອງພວກເຮົາ

ມື້ຕໍ່ມາຂ້າພະເຈົ້າບອກພວກນັກຮຽນວ່າ:

-ຫ້ອງນອນຕ້ອງສະອາດ! ພວກສູຕ້ອງຕັ້ງຜຽນກັນ ມີເວນປະ
ຈຳວັນ ຜູ້ໃດຊິໄປໃນເມືອງໄດ້ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກກູເທົ່ານັ້ນ, ຜູ້ໃດຝ່າຝືນບໍ່ຕ້ອງກັບມາອີກ ກູຊິບໍ່ປ່ອຍໃຫ້ມັນຜູ້ນັ້ນຄືນມາ.

-ໂທ້! -ໂອໂລຄອບ ອຸທານ, -ຊິບໍ່ຫລຸດຍ່ອນຜ່ອນຜັນໃຫ້
ພວກເຮົາແດ່ຈັກຫນ້ອຍຫວະ?

-ເລືອກເອົາຕາມໃຈໄດ້ເລີຍ ອັນໃດມັນເຫມາະກັບພວກສູ ກູສະ
ເຫນີໄດ້ແຕ່ພຽງທ່ານີ້ລະ, ຈຳເປັນຕ້ອງມີລະບຽບວິໄນກັນແດ່ ຖ້າ
ພວກສູບໍ່ພໍໃຈ ເຊີນໄປເລີຍ ແຕ່ຜູ້ຢາກຢູ່ຫນີ້ຕ້ອງປະຕິບັດຕາມລະ

ບນບ ພວກສູນັກຢ່າງໃດກໍໄດ້, ກູອຶ່ມແລ້ວເລື່ອງໄລ່ຈັບຂະໂມຍຢູ່ຫນ້ານະ.

ຊາໂດຣອບ ເດ່ນ້ໍາມາຈັບກັບຂ້າພະເຈົ້າ:

-ເຫັນດີ ເຈົ້າເວົ້າກ໊ກແລ້ວ! ໂອໂລຄອບ ໂຕຫັ້ນງັບປາກໄວ້ແດ່ ໂຕບໍ່ຮູ້ຫຍັງເລີຍກ່ຽວກັບເລື່ອງຫມູ່ນີ້, ເກີ່ງຢ່າງໃດຕະຫລອດລະດູຫນາວປີນີ້ ພວກເຮົາຢູ່ຫນ້ໍ້ກໍຍັງດີກ່ວາໄປນ່ອນຄຸກບໍ່ແມ່ນຫວະ?

-ແລ້ວເລື່ອງຮຽນຫນັງສືຫັ້ນເດ? ຕ້ອງບັງຄັບຫວະ? -ໂອ ໂລຄອບ ກ່າມຂຶ້ນ.

-ແນ່ນອນແລ້ວ.

-ຄັນຂ້ອຍບໍ່ຢາກຮຽນເດ? ມັນຊິມີປະໂຫຍດຫຍັງສໍາລັບຂ້ອຍ?

-ເລື່ອງຮຽນຫນັງສື ແມ່ນຄວາມຈໍາເປັນຢ່າງຫນ້ໍ້າສໍາລັບທຸກໆຄົນ ມ້ໍາຊິຢາກຫລືບໍ່ຢາກ ບໍ່ສໍາຄັນ ເຫັນບໍ່ວ່າຫວ່າງກ໊ັ້ນ ຊາໂດຣອບ ຍັງເວົ້າໃຫ້ມ້ໍາວ່າ ບໍ່ຮູ້ທີບຫຍັງ ຈັ່ງຊັ້ນມ້ໍາຕ້ອງສຶກສາຮ່ໍາຮຽນຫາຄວາມຮູ້ເພື່ອຊິໄດ້ເປັນຄົນສະຫລາດນໍາຫມູ່.

ໂອໂລຄອບ ແກວ່ງຫົວໄປມາແບບເປັນຕາຫົວ ແລ້ວປ່ອຍຄໍາຜະຫຍາ ອູກຮາອົນ ອອກມາວ່າ: -ເຕັ້ນເກ່ັ້ງຫລາຍເລີຍຕົກຊ້ໍາ!

ກ່ຽວກັບເລື່ອງລະບນບວິໄນນີ້ ການປະທະກັບ ຊາໂດຣອບ ເປັນຂ໊ີດຫມາຍບອກບາດລ້ັ້ງອບາດຫນ້ໍ້ງ. ເວົ້າກັນຕາມຈິງແລ້ວ ຂ້າພະເຈົ້າບໍ່ຄ໊ິດກົນແຫນ້ງໃຈຈັກຫນ້ອຍເລີຍ. ແມ່ນແລ້ວຂ້າພະເຈົ້າຕ໊ັ້ນກຮຽນ! ຂ້າພະເຈົ້າສໍານ໊ົກເກ່ີ້ງການກະທໍາອັນຫຍາບຊ້ໍາຂອງຕົນເອງທາງດ້ານຫລ໊ັກການສຶກສາ ແລະພ໊ຶດຕິກໍາອັນບໍ່ຊອບທໍາຂອງຕົນ

ດ້ວຍຄວາມເຈັບໃຈ ແຕ່ໃນເວລາດຽວກັນກໍເຫັນວ່າຄວາມບໍລິສຸດ ໃຈ ທີ່ແຝງຕົວຢູ່ໃນສະຕິສຳນຶກຂອງຄົນຜູ້ຫນຶ່ງນັ້ນ ມັນເປັນພຽງ ບັນຫາສຳຮອງເມື່ອປຽບໃສ່ພາລະຫນ້າທີ່ ທີ່ເຕັ້ງຫລ້ຽງຂ້າພະເຈົ້າຢູ່. ຂ້າພະເຈົ້າຕັດສິນໃຈເດັດຂາດແລ້ວ ທີ່ຈະຕ້ອງເປັນນັກຜະເດັດການ ກ້າຫາກວ່າບໍ່ມີວິທີການອື່ນ. ຫລັງຈາກນັ້ນບໍ່ດົນ ຂ້າພະເຈົ້າກໍປະ ທະກັບໂວໂລດອບ ຢ່າງຮຸນແຮງ. ມັນນັ້ນກຶກເປັນເວນປະຈຳ ແຕ່ມັນບໍ່ປົກກວາດຫ້ນອນ ທ້າປະຕິເສດບໍ່ເຮັດເມື່ອຖືກຂ້າພະເຈົ້າ ທ້ວງຕິງ. ຂ້າພະເຈົ້າກ້ຽງຕາເບິ່ງມັນ ຄືຊິຈົກມັນເປັນຕ່ອນໆ ແລ້ວ ເວົ້າວ່າ:

- ຢ່າເຮັດໃຫ້ກູອິດບໍ່ໄດ້ເດີ້! ກວາດຫ້ອງດຽວນີ້!

- ຄັນຂ້ອຍບໍ່ເຮັດເດ້? ເຈົ້າຊິເອົາກຳປັ້ນໃຫ້ຂ້ອຍກິນຊັ້ນຫວະ? ເຈົ້ານ່ານ ຊັ...

ຂ້າພະເຈົ້າຫຍຸມຄໍເສື້ອມັນແລ້ວດຶງເຂົ້າມາ ດ້ວຍນ້ຳສຽງຈິງຈັງ ແລະຈິງໃຈທີ່ສຸດ ຂ້າພະເຈົ້າເວົ້າທ້ວງກັດແຂ້ວໃສ່ມັນວ່າ:

- ຟັງດີໆເດີ້, ຂໍບອກມຶ່ງເປັນເທື່ອສຸດທ້າຍວ່າ ບໍ່ພຽງແຕ່ກູຊິ ຍ້າຍໂຮງສີມຶ່ງເທົ່ານັ້ນ ແຕ່ກູຊິເອົາມຶ່ງມຸ່ນອຸ່ຍປຸ່ຍພຸ່ນລະ! ມຶ່ງຊິໄປ ພ້ອງທາງໃດກະເຊີນໂລດ, ກູຊິໄປຕິດຄຸກຫລືບໍ່ນັ້ນ ມັນແມ່ນເລື່ອງ ຂອງກູ!

ໂວໂລດອບ ຟົດຄໍເສື້ອອອກຈາກກຳມືຂ້າພະເຈົ້າ ແລະເວົ້າສຽງ ກ້ວໃຫ້ວ່າ:

- ເຈົ້າບໍ່ໄປຕິດຄຸກຍ້ອນເລື່ອງຕາຍໆຈັ່ງຊີ້ດອກ, ເອົາລະຂ້ອຍຊິ ກວາດດອກ ເຈົ້າຊິໄປຕ...

ຂ້າພະເຈົ້າຮ້ອງກ້ວກໃສ່ມັນວ່າ:

- ມຶ່ງເວົ້າກັບກູແນວນີ້ຫວະ?

- ໂຍ້ວ ຊິໃຫ້ເວົ້າແນວໃດຊັ້ນ? ເຈົ້າຊິໄປ...

- ດ່າກູອີກຄວາມຫນຶ່ງ ມຶ່ງຊິເຫັນດີ.

ໃນທັນໃດນັ້ນ ມັນກໍຫົວອັກໆຂຶ້ນ ທັ້ງໂບກມືໄປມາ:

- ເຈົ້ານີ້ພຶ້ກແທ້ໆນໍ, ເອົ້າລະ ເອົ້າລະ ຢ່າຮ້ອງອີກເລີຍ ຂ້ອຍ ຊິກວາດດອກຫ້ອງຫັ້ນ!

ເປັນທີ່ຫນ້າສັງເກດວ່າ ຂ້າພະເຈົ້າເອງບໍ່ເຄີຍຄຶດແມ່ນແຕ່ວ່ານາທີ ດຽວວ່າ ຈະມີວິທີການອົບຮົມອັນມີລິດເດດແບບໃດແບບຫນຶ່ງນອນ ຢູ່ໃນຄວາມຮຸນແຮງ. ເຫດການລະຫວ່າງ ຊາໂດຣອບກັບຂ້າພະ ເຈົ້າໃຫ້ບົດຮຽນລາຄາແພງແກ່ຂ້າພະເຈົ້າຫລາຍກ່ວາໃຫ້ມັນເອງ. ຂ້າ ພະເຈົ້າຢ້ານວ່າ ຕົນເອງຈະຕົກເຂົ້າໃນເສັ້ນທາງທີ່ຫນັກແຫນ້ນຫນັ້ນ ຫນວງຫນ້ອຍກ່ວາຫມູ. ສ່ວນພວກຄູຍິງນັ້ນ, ນາງ ລິດາ ເປັນຮອບນາ ຕຳຫນິວິທີການຂອງຂ້າພະເຈົ້າຢ່າງເປີດເຜີຍແລະຈິງໃຈ. ໃນແລງມື້ ນັ້ນນາງມາໂອ້ລົມກັບຂ້າພະເຈົ້າວ່າ:

- ຊັ້ນແປວ່າເຈົ້າຄົ້ນພົບວິທີປະຕິບັດແລ້ວແມ່ນບໍ? ຄືຫລັກການ ສຳນະນາແຕ່ເກົ່າຫັ້ນແມ່ນບໍ່ລະ?

- ຂໍທານນຳເທາະ, ລິດາ ຢ່າກວນຂ້ອຍເລີຍ!

- ບໍ່ນ່າ, ເວົ້າແທ້ໃດ ພວກເຮົາຊິຕ້ອງຕິເຂົາຫວະ? ຂ້ອຍເດ... ມີສິດບໍ່ ຫລືວ່າມີແຕ່ເຈົ້າຜູ້ດຽວເທົ່ານັ້ນ?

- ລິດາ ບາດແລ້ວຂ້ອຍຈະເລົ່າສູ່ເຈົ້າຟັງດອກ ແຕ່ໃນເວລານີ້ ຂ້ອຍເອງຍັງບໍ່ຮູ້ເລີຍວ່າອັນໃດເປັນອັນໃດ, ກ້າອີກຈັກຫນ້ອຍກ່ອນ.

ສ່ວນ ເອົາເຕີຣິນາ ກຣິກໍເຮັບນາ ນັ້ນງ່ວນນຶດຢູ່ຫລາຍມື້, ນາງເຮັດຫນ້າຫຍຸ້ງແລະເວົ້າກັບຂ້າພະເຈົ້າດ້ວຍນ້ຳສຽງແຜ່ໄມຕີຢ່າງເປັນທາງການ. ຈົນຮອດຫ້າມື້ຜ່ານໄປ ນາງຈຶ່ງມາຫາມຂ້າພະເຈົ້າດ້ວຍຮອຍຍິ້ມຂຶ້ນໆຕາມແບບຂອງນາງວ່າ:

- ເຈົ້າຮູ້ສຶກຈັ່ງໃດລະ?

- ກໍຄືເກົ່ານັ້ນແລ້ວ, ຂ້ອຍສຳບາຍດີທຸກຢ່າງ.

- ແລ້ວເຈົ້າຮູ້ບໍ່ວ່າ ແນວຫນ້າອະເຫຍື້ອງກ່ວາຫມູ່ແມ່ນຫຍັງ?

- ແນວອະເຫຍື້ອງກ່ວາຫມູ່ວ່າຕີ?

- ແມ່ນແລ້ວ, ແນວເປັນຕາຫນ່າຍກ່ວາຫມູ່ກໍແມ່ນວ່າພວກເດັກນ້ອຍຫມູ່ນັ້ນ ເວົ້າຮອດໄຊຊະນະຂອງເຈົ້າຢ່າງຫນ້າອອນຊອນ, ແບບຢາກວ່າ ພວກເຂົາພ້ອມທີ່ຈະບູຊາຍົກຍ້ອງເຈົ້າພຸ້ນນ່າ ໂດຍສະເພາະ ຊາໂດຣອບ ນັ້ນລະເປັນຮ້າຍກ່ວາຫມູ່ ມັນຫມາຍຄວາມວ່າແນວໃດ? ຂ້ອຍບໍ່ເຂົ້າໃຈເລີຍ! ມັນແມ່ນນິໄສຂອງພວກຂ້າທາດເບາະ?

ຂ້າພະເຈົ້າຄຶດຢູ່ຄາວຫນຶ່ງແລ້ວເວົ້າວ່າ:

- ບໍ່ແມ່ນແນວນັ້ນດອກ, ແນວຄຶດແບບຂ້າທາດ ບໍ່ມີຄວາມຫມາຍຫຍັງໃນເລື່ອງນີ້; ເຫດການມັນເປັນອີກແບບຫນຶ່ງ; ວິເຄາະພິຈາລະນາເບິ່ງໃຫ້ດີ: ຄວາມຈິງມີຢູ່ວ່າ ຊາໂດຣອບ ນັ້ນເຂັ້ມແຂງກ່ວາຂ້ອຍຊ້ຳມັນອາດຊິຟາດຂ້ອຍລົງບາດດຽວ ແລະມັນກໍບໍ່ຢ້ານຫຍັງຫມົດ ບໍ່ວ່າບັກ ບູຮູນຫລືຜູ້ອື່ນໆກໍຕາມ. ເວລາເກີດເຫດນັ້ນ ພວກເຂົາບໍ່ຄຶດເຖິງເລື່ອງຕີຕ່ອຍນີ້ຊ້ຳ ແຕ່ພວກເຂົາເຫັນຄວາມໂມໂຫເຫັນຈຸດລະເບີດຂອງຄົນຜູ້ຫນຶ່ງ. ພວກມັນເຂົ້າໃຈດີທີ່ສຸດວ່າ ຂ້ອຍ

ບໍ່ມີຄວາມຈຳເປັນໃດໆທີ່ຈະຕ້ອງຕີ ຊາໂດຣອບ ເລີຍ ແຕ່ສາມາດ ສົ່ງມັນຄືນໄປໃຫ້ຕຳຫລວດຈັດການ ໃນຖານະເດັກອັນທະພານດັດ ສ້າງບໍ່ໄດ້ ແລະເຮັດແນວກ່ອຍໆອັນອື່ນໃສ່ພວກມັນອີກ. ແຕ່ຂ້ອຍບໍ່ ເຮັດແນວນັ້ນ ຂ້ອຍເລືອກເອົາວິທີທາງທີ່ເປັນອັນຕະລາຍສຳລັບໂຕ ເອງ ແຕ່ມີມະນຸດສະທຳບໍ່ແມ່ນແບບອາດຍາສິດ. ບັດນີ້ ມັນເປັນທີ່ ຈະແຈ້ງແລ້ວວ່າ ພວກມັນເອງຕ້ອງເພິ່ງນິຄົມ ເລື່ອງມັນບໍ່ງ່າຍປານ ໃດ, ນອກນີ້ພວກມັນເຫັນກັບຕາແລ້ວວ່າ ພວກເຮົາເຮັດວຽກ ຫລາຍເທົ່າໃດເພື່ອພວກມັນ. ນີ້ແມ່ນຈຸດສຳຄັນຫລາຍ, ພວກເຂົາ ເລີ່ມມີຈິດສຳນຶກເຖິງຄວາມເປັນຄົນແລ້ວ.

-ບາງທີ ກໍອາດແມ່ນແນວນັ້ນ, -ເອົາເຕີຣິນາ ເວົ້າທ່າທາງ ໃຊ້ຄວາມຄຶດຫລາຍສົມຄວນ.

ແຕ່ພວກເຮົາບໍ່ທັນມີເວລາໄດ້ຄຶດຄົ້ນຫຍັງຫລາຍດອກ. ຫລັງ ຈາກນັ້ນອາທິດຫນຶ່ງ ຄືໃນເດືອນກຸມພາ ໑໙໘໑ ຂ້າພະເຈົ້າໄດ້ຂີ່ ກວນເຂົ້າໃນເມືອງ ແລະນຳເອົາເດັກນ້ອຍໄຮ້ຍາດ, ຂໍທານແທ້ໆມາ ນຳຮອດ ໑໕ ຄົນ. ພວກເຮົາມີວຽກເຮັດຈົນລົ້ນມື ຄືທ້າຕ້ອງອາບ ນ້ຳລ້າງສ່ວຍພວກເຂົາ, ຫາເຄື່ອງນຸ່ງຂອງກຸມາໃຫ້ຕາມສະພາບ ແລະຈັດການຂ້າຂີ້ຫີດໃຫ້ພວກເຂົາ. ມາຮອດເດືອນມີນາ, ສະມາ ຊິກນິຄົມມີຮອດ ໓໐ ສ່ວນຫລວງຫລາຍຍັງປ່າເກືອນໂຫດຫ້ຽມ ຫລາຍ ແລະບໍ່ໃກ້ທີ່ຈະສອດໃກ້ກັບຄວາມຄຶດຝັນກ່ຽວກັບການ "ສຶກ ສາອົບຮົມທາງສັງຄົມ" ຈັກຫນ້ອຍ. ມາຮອດເວລານັ້ນ ພວກເຂົາ ຍ້ຽຢູ່ຫ່າງໄກກັບຄວາມຄຶດຂອງອັດສະລິຍະຜູ້ຫນຶ່ງທີ່ເວົ້າວ່າ ສາມາດ

ເຮັດໃຫ້ລະບົບຄວາມນຶກຄິດຂອງເດັກນ້ອຍ ຫຍັບເຂົ້າໃກ້ກັບຄວາມ
ນຶກຄິດຂອງນັກວິທະຍາສາດ.

ນິຄົມຂອງພວກເຮົາມີຄູສອນຫລາຍຂົ້ນນຳຄືກັນ. ນາຮອດ
ເດືອນມີນາ ພວກເຮົາຈັດຕັ້ງກັນເປັນສະພາຄູແຫ່ງຫນຶ່ງໄດ້ແທ້ໆ
ແລ້ວ. ຫມົດທຸກຄົນໃນນິຄົມຕົ້ນເຕັ້ນອອນຊອນນຳຄູສອງຜົວເມຍຄື
ອີວານ ອີວາໂນວິດ ໂອຊີບິບ ກັບເມຍຂອງລາວ ນາງ ນາຕາເລຍ
ນາກກອບນາ ພວກເຂົາມີເຄື່ອງຂອງມານຳຫລາຍສົມຄວນ ຄືມີທັງ
ເຄື່ອງເຮືອນເຊັ່ນ ຕັ່ງນອນຍາວ, ຕັ່ງຂົ້ຕູ້, ເສື້ອຜ້າຈຳນວນຫລວງ
ຫລາຍ ແລະເຄື່ອງໃຊ້ໃນຄົວ . ພວກເດັກນ້ອຍຂອງພວກເຮົາ ເຊິ່ງ
ຢູ່ໃນສະພາບເຄິ່ງເປືອຍນັ້ນ ແນມເບິ່ງການຂົນຍ້າຍສົມບັດເຫລົ່ານີ້
ໄປໄວ້ຕໍ່ຫນ້າຫ້ອງພັກຂອງຄອບຄົວ ໂອຊີບິບ ດ້ວຍຄວາມສົນໃຈ
ເປັນພິເສດ ແລະແນ່ນອນແລ້ວຄວາມຮູ້ສຶກດັ່ງກ່າວ ບໍ່ໄດ້ເກີດຂົ້ນ
ຢ່າງລົມໆແລ້ງໆດອກຂ້າພະເຈົ້າຄິດຢ້ານທີ່ສຸດວ່າ ສິ່ງຂອງຄືໆທັງ
ຫລາຍເຫລົ່ານີ້ ຈະປ່ຽນທາງເດີນຄືນກັບໄປວາງເທິງໂຕະຂາຍເຄື່ອງ
ເລ ຢູ່ຕະຫລາດໃນເມືອງຟຸ້ນຫລາຍກ່ວາ. ອາທິດຫນຶ່ງຜ່ານໄປ
ຄວາມສົນໃຈຂອງເດັກນ້ອຍທີ່ມີຕໍ່ສົມບັດຂອງຄູ່ຜົວເມຍ ໂອຊີບິບ
ຫລຸດຜ່ອນລົງຍ້ອນມີແມ່ເກົ້ານາຍບ້ານຊື້ຄົນຫນຶ່ງເດີນທາງມາຮອດນິ
ຄົມ. ແມ່ຍິງຄົນນີ້ເກົ້າແກ່ຫລາຍແລ້ວ ນິໄສດີ ມັກລົມ ແຕ່ເຫງົາ
ຫງາກໂງ່ຈ້າເປັນທີ່ສຸດ. ເຖິງແມ່ນວ່ານາງບໍ່ມີເຄື່ອງໃຊ້ມາຫລາຍ
ເທົ່າກັບສອງຜົວເມຍ ໂອຊີບິບກໍຕາມ ແຕ່ຫີບຫໍ່ເລັກໆນ້ອຍຂອງນາງ
ກໍຫາກເຕັມໄປດ້ວຍເຄື່ອງກິນເປັນຕາແຊບ ເຊັ່ນແປ້ງເຂົ້າຈີ່, ກວນ
ຫມາກໄມ້, ເຄື່ອງດອງອົ່ນໆ ນອກນັ້ຍງມີຖົງອັອກຈອກ ແອັກແຈັກ

ເປັນຕາຮັກ ກັບຫີບເດີນທາງ ເຊິ່ງບາງຫນ່ວຍນັ້ນພວກເດັກນ້ອຍ ແນມເບິ່ງບາດດວ ກໍຮູ້ໂລດວ່າມີສິນບັດອັນລ້ຳຄ່າຫລາຍແນວຢູ່ໃນ ນັ້ນ.

ແມ່ເກົ້ານາຍບັນຊີຈັດແຕ່ງຫ້ອງພັກຂອງລາວ ໃຫ້ສະດວກສະ ບາຍກຶກໃຈຕາມລິດນິຍົມຂອງຜູ້ເກົ້າຢ່າງເຫັນໄດ້ຄັກ ເຊັ່ນ ວ່າ ລາວເອົາແກ້ວເຕົ້າແອບ ແລະ ພາຊະນະອື່ນລວມໃສ່ກ້ານຕູ້ເປັນ ກັນແກວຕາມປະເພດສິ່ງບັນຈຸງ່າຍຕໍ່ການຈັບອອກມາໃຊ້. ໃນເວລາ ບໍ່ດົນ ລາວຜູກມິດສະຫນິດສະຫນົມກັບເດັກນ້ອຍໄດ້ສອງສາມຄົນ. ການຄົບຄ້າສະມາຄົມດັ່ງກ່າວ ຕັ້ງຢູ່ບົນເງື່ອນໄຂພື້ນຖານຢ່າງຫນຶ່ງ ຄືພວກເຂົາຫາຟືນມາດັ່ງໄຟໃສ່ຫມໍ້ນ້ຳຊາ (ຫມໍ້ຊາໂມວ) ໃຫ້ລາວ ແລະລາວກໍລ້ຽງນ້ຳຊາພວກເຂົາ ພ້ອມທັ້ງເລົ່າເລື່ອງຊີວິດແຜ່ງບັດຊະ ຍາຂອງລາວສູ່ພວກເຂົາຟັງ. ເວົ້າແທ້ແລ້ວ ຢູ່ໃນນິຄົມຂອງພວກ ເຮົານີ້, ບໍ່ມີວຽກຫຍັງສຳລັບແມ່ເກົ້ານາຍບັນຊີຜູ້ນີ້ເຮັດເລີຍ ແລະ ຂ້າພະເຈົ້າກໍປະຫລາດໃຈບໍ່ແລ້ວທີ່ທາງການສົ່ງລາວມາໃຫ້ແບບນີ້ ບໍ່ ມີຫຍັງຫນ້າສົງໄສເລີຍ, ພວກເຮົາບໍ່ຕ້ອງການນາຍບັນຊີຈັກຫນ້ອຍ, ພວກເຮົາທຸກໄຮ້ເອົາແທ້ເອົາວ່າ.

ນອກຈາກຫ້ອງນ້ອຍໆ ບໍ່ເທົ່າໃດຫ້ອງສຳລັບພະນັກງານແລ້ວ ພວກເຮົາມີຄວາມສາມາດແຕ່ພໍພຽງແຕ່ມີຮົ້ວຫ້ອງນອນກ້ວາງໆ ຫ້ອງ ຫນຶ່ງເທົ່ານັ້ນ ແລະມີເຕົາຝົ່ງໃຫ້ຄວາມອົບອຸ່ນແບບ ປຣຸດເຊຍຢູ່ ສອງເຕົາ. ໃນຫ້ອງນີ້ພວກເຮົາຍັດຕຽງພັບໃສ່ ສ ຕຽງ ແລະໂຕະ ອ່າວໃຫຍ່ອີກ ສ ຫນ່ວຍສຳລັບໃຊ້ເປັນບ່ອນກິນເຂົ້າ ແລະຂຽນ ຫນັງສືຂອງພວກນັກຮຽນ. ຫ້ອງອີກບ່ອນຫນຶ່ງກ້ວາງຂວາງຂະ

ຫນາດດງອກັນ ແລະໂຮງອາຫານ, ຫ້ອງຮຽນສອງຫ້ອງກັບຫ້ອງ ການຫ້ອງຫນຶ່ງກຳລັງລໍຄອຍການສ້ອມແປງຢູ່.

ພວກເຮົາມີຜ້າປູບ່ອນຢູ່ແຕ່ຊຸດເດົ່ງ ແລະນອກນັ້ນກໍບໍ່ມີຜ້າຊະ ນິດໃດອີກ. ວິທີແກ້ບັນຫາກ່ຽວກັບເຄື່ອງນຸ່ງຫົ່ມຂອງພວກເຮົາມີຢູ່ ວິທີດຽວ ແຕ່ກໍມີຫວັງຫນ້ອຍເຕັມທີ ຄືຂໍທານນຳກະຊວງສຶກສາປະ ຊາຊົນແລະສະຫກາບັນອື່ນໆເທົ່ານັ້ນ.

ຜູ້ອຳນວຍການພະແນກສຶກສາປະຊາຊົນ ທີ່ເຄີຍສະຫນັບສະ ຫນູນໃຫ້ໄຂນິຄົມ ກໍຖືກເອີ້ນໄປຮັບຫນ້າທີ່ອື່ນແລ້ວ ແລະຜູ້ມາ ແທນລາວກໍບໍ່ໃຄ່ສົນໃຈພວກເຮົາເທົ່າໃດ ຍ້ອນວ່າມີວຽກງານສຳຄັນ ອື່ນສຸມເຕັມຫົວຢູ່ແລ້ວ.

ບັນຍາກາດພາຍໃນພະແນກສຶກສາປະຊາຊົນນັ້ນ ບໍ່ມີທາງວ່າຊີ້ຍູ ດັນໃຫ້ຄວາມນຶກຝັນກ່ຽວກັບຄວາມຢູ່ດີມີສຸກຂອງພວກເຮົາກາຍເປັນ ຄວາມຈິງເລີຍ. ເວລານັ້ນພະແນກດັ່ງກ່າວ ແມ່ນກຸ່ມຫ້ອງການຈຳ ນວນຫລວງຫລາຍຫົ້ງໃຫຍ່ແລະນ້ອຍ, ມີພະນັກງານ ຕ້ງວ່າເທົ່າໃດ, ແຕ່ເຖິງຢ່າງນັ້ນກໍຕາມ ມັນບໍ່ແມ່ນຫ້ອງການ ຫລືຄົນຫົ້ງຫລາຍເຫລົ່ານີ້ດອກທີ່ເຮັດໃຫ້ກິດຈະການກ່ຽວກັບການສຶກສາມີຊີວິດຊີວາຂຶ້ນຢູ່ໃນ ສະຫກາບທີ່ແຫ່ງນັ້ນ ແຕ່ແມ່ນໂຕະພຸ້ນຕ່າງຫາກ. ມີໂຕະຢູ່ຫລາຍຊະ ນິດມີໂຕະຂຽນຫນັງສື, ໂຕະແຕ່ງຕົວ ຫລືໂຕະສຳລັບຫລິ້ນໄພ, ມັນ ແຕກຫັກເປັນຕ່ອນກະຈັດກະຈາຍ, ແຕ່ຄາວກ່ອນອາດຈະມີສີດຳຫລື ແດງ, ມີຕ່ັ້ງອີ້ເຂົ້າຊຸດຢູ່ພ້ອມ. ແມ່ນໂຕະຫົ້ງຫລາຍເຫລົ່ານີ້ແລ້ວທີ່ ສະແດງຕົວບອກຂະແຫນງການຕ່າງໆໃນສະຫກາບັນ ຄືກັບປ້າຍຫ້ອຍ ຢູ່ຝາຕໍ່ຫນ້າແຕ່ລະໂຕະຂຽນບອກຫມາຍໄວ້ນັ້ນແລ້ວ. ໂຕະເຫລົ່ານີ້

ສ່ວນຫລາຍຫວ່າງເປົ່າຢູ່ສະເຫມີ ເພາະຄົນຜູ້ເປັນສ່ວນປະກອບສົມ
ບູນຂອງໂຕະຫນ່ວຍຫນຶ່ງນັ້ນ ອາດຈະເປັນຫົວຫນ້າພະແນກ ຫລື
ນາຍບັນຊີຂອງຫ້ອງການແບ່ງປັນສະບາງກໍໄດ້ເທົ່າໆກັນ. ຖ້າຫາກ
ວ່າມີຜູ້ໃດຜູ້ຫນຶ່ງສ່ຽງໄພສະເຫນີຫນ້າ ນັ່ງຢູ່ເບື້ອງຫລັງໂຕະເຫລົ່ານີ້
ແລ້ວ, ແຂກຄົນຜູ້ມາຕິດຕໍ່ກໍຈະພາກັນແລ່ນປຸ້ນມາໃສ່ເຂົາໂລດ.
ການໂອ້ລົມສົນທະນາຈຳກັດຕົວຢູ່ຈຸດດຽວຄື ຢາກຮູ້ວ່າພະແນກນີ້
ແມ່ນພະແນກຫຍັງ, ແມ່ນພະແນກຜູ້ມາຫາຕ້ອງມາພົວພັນນຳບໍ
ຫລືວ່າແມ່ນພະແນກອື່ນຟຸ້ນ? ແລະຖ້າຫາກວ່າບໍ່ແມ່ນພະແນກນີ້
ແລ້ວແມ່ນຍ້ອນເຫດຜົນຫຍັງແລະແມ່ນພະແນກໃດແທ້ໆ, ແລະ
ເປັນຫຍັງສະຫາຍຜູ້ນັ່ງຢູ່ໂຕະນີ້ຫວ່າງວັນເສົາແລ້ວນີ້ ຈຶ່ງບອກວ່າ
ແມ່ນພະແນກນັ້ນແທ້ໆ. ຫລັງຈາກແກ້ຄຳຖາມແຕ່ລະຂໍ້ເຫລົ່ານີ້
ແລ້ວ ຫົວຫນ້າພະແນກກໍລຸກຫນີຫາຍຕົວອັບໄປພໍປານດາວສະ
ເດັດ.

ເປັນທຳມະດາຢູ່ວ່າ ການດຳເນີນງານແບບຂາດບົດຮຽນຂອງ
ພວກເຮົາ ຢູ່ອ້ອມຂ້າງໂຕະເຫລົ່ານີ້ ບໍ່ໃຫ້ຫມາກໃຫ້ຜົນອັນໃດຈັກ
ຫນ້ອຍ. ດ້ວຍເຫດຜົນນີ້ ນິຄົມຂອງພວກເຮົາໃນປີ ໑໙໘໑ ນັ້ນ
ຈຶ່ງບໍ່ມີຫຍັງເບິ່ງຄ້າຍຄືສະຖານທີ່ສຶກສາອົບຮົມຈັກຫນ້ອຍ: ເສື້ອ
ນອກກົດໆຂາດໆຫໍ່ຫຸ້ມຮ່າງກາຍຂອງພວກເດັກນ້ອຍ ເກືອບບໍ່ຫຸ້ມ,
ສົມຄວນເອີ້ນມັນຕາມພາສາຕະຫລາດວ່າ "ເສື້ອກ໊ຶ" ຫລາຍກ່ວາ,
ຫນ້ອຍເທື່ອຈະເຫັນວ່າ ມີຍອຍເສື້ອຊ້ອນໃນຂາດສ້ອຍຫ້ອຍຍ່ອນ
ລອດອອກມາ. ເຄື່ອງນຸ່ງທີ່ໂກ້ງາມຂອງພວກເດັກນ້ອຍຮຸ່ນທຳອິດບໍ່
ຫມັ້ນຫນຽວທົນທານຢູ່ໄດ້ດົນປານໃດ ວຽກງານຕ່າງໆເຊັ່ນການຂົນ

ໄມ້ ວງກເຮືອນຄົວ ວງກໂຮງຊັກເຄື່ອງ ທ້າຫມິດນີ້ປະຕິບັດພາລະ ກິດຂອງມັນຢ່າງມີຜົນ ແມ່ນຢູ່ວ່າວງການເຫລົ່ານີ້ເປັນສ່ວນຫນຶ່ງ ຂອງວງການສຶກສາສາດ ແຕ່ມັນໄດ້ທຳລາຍເສື້ອຜ້າອາພອນຂອງ ພວກເດັກນ້ອຍໄປຫມົດ. ມາເຖິງເດືອນມີນາ ນັກຮຽນຂອງພວກ ເຮົາ ຢູ່ໃນຊຸດຊະນິດທີ່ວ່າ ນັກສະແດງບົດ "ລູກຈ້າງໂຮງສີ" ໃນ ເລື່ອງ "ຮູດຊານກາ" ຄົງຈະຕ້ອງອາຍໄປຟຸ້ນລະ.

ໃນຫມູ່ພວກເຂົານັ້ນ ມີຫນ້ອຍຄົນດອກມີເກີບໃສ່ ສ່ວນຫລວງ ຫລາຍແລ້ວແມ່ນເອົາຜ້າຂາດມັດຕໍ່ໃສ່ກັບເຊືອກມັດກ້ອງພັນຕີນໄວ້, ແຕ່ປານນັ້ນ ເກີບແບບປະຖົມປະຖານແນວນີ້ຍັງໄດ້ສ້າງອິດກາມຢູ່ ພາຍໃນນິຄົມຂອງພວກເຮົາເປັນປະຈຳ.

ອາຫານປົກກະຕິຂອງພວກເຮົາຊື່ວ່າ "ກອນຊອກ*" ອາຫານ ຢ່າງອື່ນໆນັ້ນ ດົນໆຈຶ່ງໄດ້ຈອບເທື່ອຫນຶ່ງ. ໃນປານນັ້ນ ພວກເຮົາມີ ອັດຕາອາຫານຢູ່ຫລາຍຂະຫນາດ ເຊັ່ນວ່າ ອັດຕາທຳມະດາ, ອັດ ຕາສຳລັບຜູ້ອ່ອນແອ ແລະສຳລັບຜູ້ແຂງແຮງ, ອັດຕາສຳລັບເດັກ ຂາດອາຫານ, ອັດຕາຜູ້ພັກຟື້ນ ແລະອັດຕາຄົນປ່ວຍໃນໂຮງຫມໍ, ດ້ວຍການເຄື່ອນໄຫວແບບການທຸດຢ່າງແຂງຂັນ, ດ້ວຍການຮ້ອງຂໍ ອ້ອນວອນໃຫ້ເບິ່ງສະພາບອັນຫນ້າສັງເວດຂອງພວກເຮົາ ຫລືແມ່ນ ແຕ່ດ້ວຍການນາບຂູ່ວ່າພວກເດັກນ້ອຍຈະລຸກຮືຂຶ້ນ ບາງເທື່ອພວກ ເຮົາຈຶ່ງໄດ້ຮັບອັດຕາສຳລັບຜູ້ພັກຟື້ນ. ອັດຕານີ້ປະກອບດ້ວຍນ້ຳນົມ, ຕ່ອນນ້ຳມັນແລະເຂົ້າຈີ່ຂາວ ຫລືອັດຕາອື່ນໆ. ແນ່ນອນແລ້ວວ່າ

---

*ແປ້ງກວນຢ່າງຫນຶ່ງ.

ພວກເຮົາບໍ່ໄດ້ແຕະຕ້ອງອາຫານປະເພດນົ້ວອກ, ຢ່າງດີທີ່ສຸດກໍແມ່ນ ຈຳພວກແປ້ງກວນແລະເຂົ້າຈີ່ກໍເທົ່ານັ້ນແລ້ວ, ເກືອບທຸກໆ ເດືອນພວກເຮົາຕົກຢູ່ໃນສະພາບຫມົດຫວັງທໍ້ຖອຍ ອັນເຮັດໃຫ້ ສະຖານະການ ເປັນຢູ່ຂອງພວກເຮົາສັບສົນແບບທຳມະດາໆ ນັ້ນເອງ ຈາກນັ້ນພວກເຮົາກໍຕ້ອງເລີ່ມຕົ້ນການເຈລະຈາອັນສັບສົນວົກວົນ ລັບ ລັ້ຄົນໃຫມ່ອີກ. ບາງເວລາພວກເຮົາກໍສາມາດຈັດການແກ້ໄຂໄດ້ຈົນ ໄດ້ຮັບຮອດຊົ້ນ ອາຫານກະປ໋ອງ ແລະເຂົ້າຫນົມອົມ ແຕ່ສະພາບຊີ ວິດການເປັນຢູ່ຂອງພວກເຮົາ ຍົ່ງຫນັກຫນ່ວງອະນາຖາຍົ່ງຂຶ້ນອີກ ເມື່ອປາກົດວ່າ ບຸກຄົນຜູ້ຂາດຄຸນສົມບັດທັ້ງຫລາຍນັ້ນ ບໍ່ມີສິດໃນ ວັດຖຸສົ່ງຂອງເຫລົ່ານີ້ຊ້ຳ ຄົງມີແຕ່ພວກປັນຍາຫນ້ອຍເທົ່ານັ້ນຈົ່ງມີ ສິດຊົມໃຊ້.

ບາງໂອກາດພວກເຮົາກໍຫນີ້ນອອກຈາກຂອບເຂດ ອັນຄັບແຄບ ຂອງໂລກສຶກສາອົບຮົມ ແລະໂດດລ່ວງເຂົ້າໄປຫາຂົງເຂດໃກ້ຄຽງ ເຊັ່ນ ຄະນະກຳມາທິການເສີມສະບຽງຂອງແຂວງ ຫລືຄະນະກຳມາ ທິການສະບຽງຂອງກອງທັບຫນູນພາກທີ ๑ ຫລືວ່າພະແນກສະ ບຽງບ່ອນໃດບ່ອນຫນຶ່ງຂອງອົງການນີ້. ພະແນກສຶກສາປະຊາຊົນ ນັ້ນເກືອດຫ້າມການໃຊ້ວິທີການແບບກອງຫລອນແນວນີ້ ຢ່າງເດັດ ຂາດຈັ່ງຊັ້ນພວກເຮົາຈົ່ງຕ້ອງດຳເນີນການພົວພັນເຫລົ່ານີ້ແບບລັບລີ້ ແທ້ໆ.

ມັນຈຳເປັນແທ້ໆ ທີ່ພວກເຮົາຕ້ອງມີເຈ້ຍບັນຈຸຂໍ້ຄວາມງ່າຍໆ ຈະແຈ້ງຢ່າງຫນຶ່ງຕິດຕໍ່ເປັນອາຈຸດປະຈຳ. ຂໍ້ຄວາມເຫລົ່ານັ້ນເວົ້າ

ວ່າ "ນິຄົມດັດສ້າງຊາວຫນຸ່ມຕິດໄພສັງຄົມ" ຂໍຮ້ອງໃຫ້ສົ່ງແປ້ງ ๑๐๐ ປຸດ ເພື່ອລ້ຽງນັກຮຽນ".

ຢູ່ພາຍໃນນິຄົມ ພວກເຮົາບໍ່ໃຊ້ຄຳສັບເຊັ່ນ "ຕິດໄພສັງຄົມ" ນີ້ ຈັກເທື່ອ ແລະນິຄົມຂອງພວກເຮົາກໍບໍ່ເຄີຍໃສ່ຊື່ນີ້ເລີຍ. ເພິ່ນເອີ້ນ ພວກເຮົາວ່າ " ພວກຂາດຄຸນສົມບັດ" ແຕ່ສຳລັບຜູ້ຢູ່ນອກວົງການ ສຳນວນນີ້ບໍ່ເຫມາະສົມປານໃດ ເພາະມັນອາບເອືອບໄປດ້ວຍກິ່ນ ອາຍແຫ່ງລະບົບສຶກສາອາດຍາສຶກຢູ່ຫລາຍແຕ່.

ເມື່ອໄດ້ເຈ້ຍແຜ່ນນີ້ຢູ່ໃນມືແລ້ວ ຂ້າພະເຈົ້າຈະໄປຢືນຢູ່ໃນຮ່ອມ ລະບຽງຕຶກອົງການທີ່ກ່ຽວຂ້ອງບ່ອນໃດບ່ອນຫນຶ່ງ ເລືອກບ່ອນພໍ ເຫມາະພໍດີ ຊຶ່ງບານຜັກຕູ້ຫ້ອງການສຳຄັນນັ້ນໂລດ. ຜູ້ຄົນຈຳນວນ ຫລວງຫລາຍຫລຸຫລັ່ງເຂົ້າໄປ ບາງເທື່ອມີຜູ້ເຂົ້າໄປຫລາຍ ຈົນຂ້າ ພະເຈົ້າຄຶດວ່າ ບໍ່ວ່າຜູ້ໃດກໍຄົງສາມາດຫມັ້ນເຂົ້າໄປໄດ້ ແລະເມື່ອເຂົ້າ ໄປໄດ້ແລ້ວ ກໍຕ້ອງຫນັ້ນບຸຜ່ານຄົນເຂົ້າໄປຈົນເຖິງໂຕະຫົວຫນ້າ ແລະ ຈອບທີ່ຈະປ່ອນເຈ້ຍໃສ່ມືໃຫ້ລາວ ຢ່າງບໍ່ຕ້ອງປາກຕ້ອງເວົ້າຫຍັງ ຫມົດ.

ຄືວ່ານັ້ນແລ້ວ ພວກຫົວຫນ້າພະແນກສະບຽງນັ້ນບໍ່ໄດ້ຮູ້ເລື່ອງ ດີເທົ່າໃດດອກ ກ່ຽວກັບການຈັດແບ່ງອັນລະອຽດລະອໍຢູ່ໃນວຽກງານ ການສຶກສານີ້ ແລະພວກເພິ່ນກໍແນ່ນບໍ່ເຫັນວ່າລະຫວ່າງ "ຊາວ ຫນຸ່ມຕິດໄພສັງຄົມ" ກັບ "ການສຶກສາອົບຮົມ" ນັ້ນມັນມີແນວ ພົວພັນກັນ. ຫລາຍເທື່ອສຳນວນແຂງກະດ້າງຂອງກະໂຕຄຳວ່າ "ຕິດໄພສັງຄົມ" ນັ້ນເອງ ໄດ້ກາຍເປັນ ສິ່ງປະຫລາດຢ່າງຫນຶ່ງ ຈັ່ງ ຊັ້ນເກືອບບໍ່ມີກໍລະນີທີ່ພວກເພິ່ນ ຂຶ້ງຕາໃສ່ພວກເຮົາແລ້ວເວົ້າວ່າ:

- ແມ່ນພວກເຈົ້າມາເຮັດຫຍັງຢູ່ຫນີ້? ໄປຫາພະແນກສຶກສາ ປະຊາຊົນຂອງພວກເຈົ້າພຸ້ນແມ້.

ແຕ່ສ່ວນຫລວງຫລາຍ ຫລັງຈາກຄຶດຊຶງຫລຶງຄາວຫນຶ່ງແລ້ວ ພວກເພິ່ນຈຶ່ງຖາມອອກມາວ່າ:

- ແມ່ນພະແນກໃດເບີກສະບຽງໃຫ້ພວກເຈົ້າ? ຝ່າຍກອງຄະດີ ຫວະ?

- ບໍ່ດອກ ກອງຄະດີບໍ່ເບີກຫຍັງໃຫ້ພວກເຮົາເລີຍ ອັນນີ້ແມ່ນ ພວກເດັກນ້ອຍ...

- ແລ້ວແມ່ນອົງການໃດເບີກຈ່າຍໃຫ້ພວກເຈົ້າລະ?

- ຄືມັນເປັນແນວນີ້ນ່າ, ມາຮອດດຽວນີ້ມັນຍັງບໍ່ຄັກບໍ່ແນ່ເລີຍ.

- ຈັ່ງໃດຈຶ່ງວ່າ "ບໍ່ຄັກບໍ່ແນ່" ເດີ້ແທ້?

ຫົວຫນ້າພະແນກຂຽນອີ່ຫຍັງ ຍັອກໆໃສ່ປຶ້ມບັນທຶກຂອງລາວ ແລ້ວໃຫ້ພວກເຮົາກັບມາຫາໃນອາທິດຕໍ່ໄປ. ສ່ວນຂ້າພະເຈົ້າກໍ ອ້ອນວອນວ່າ:

- ຈັ່ງຊັ້ນ, ຊາມຊາຮອດອາທິດຫນ້າ ຂໍເບີກຈັກ ๘๐ ປູດກ່ອນ ໄດ້ບໍ?

- ๘๐ ປູດຫວະ? ໂອະ ບໍ່ໄດ້ດອກ, ເອົາຈັກ ๕ ປູດສາ, ບາດແລ້ວຂ້ອຍຊິແກ້ໄຂບັນຫາໃຫ້ຈະແຈ້ງດອກ.

ເຂົ້າແປ້ງ ๕ ປູດນັບວ່າຫນ້ອຍຫລາຍ ແລ້ວຈາກນັ້ນການສົນ ທະນາກໍເລີຍອອກນອກແຜນການຂອງພວກເຮົາໄປເລີຍ ແລະນັ້ນ ມັນຫມາຍຄວາມວ່າ ຈະບໍ່ມີການແກ້ໄຂໃຫ້ເລື່ອງແຈ່ມແຈ້ງແຕ່ຢ່າງ ໃດ.

ຜົນຮັບອັນດຽວຈາກວິທີການສົນທະນາແບບນີ້ ທີ່ນິຄົມຍິນດີຮັບເອົາກໍແມ່ນ ກໍລະນີນຶ ເມື່ອຜູ້ເປັນຫົວຫນ້າເອົາເຈ້ຍຂອງພວກເຮົາໄປຂຽນຍ້ອກໆລົງໃສ່ແຈ່ວ່າ "ບົ່ງຈ່າຍເຄື່ອງ" ໂດຍບໍ່ສົ່ງການຈັກຄວາມ. ເມື່ອເປັນແນວນີ້ ຂ້າພະເຈົ້າຈະຟ້າວແລ່ນເມືອນິຄົມ.

-ກາລິນາ ອີວາໂນວິດ! ໂອແດ່ ໄດ້ບົ່ງແລ້ວ! ໑໐໐ ປູດຟຸ້ນ ນ່າ, ໂອໂອ! ເອົາໃຜໄປນຳຈັກຄົນເດ໊ ແລ້ວໄປຮັບເອົາເຄື່ອງກ່ອນ ທີ່ພວກເພິ່ນຢູ່ຟຸ້ນຊິຮູ້ເມື່ອໂຕສົບສາວທາວຄວາມ.

ກາລິນາ ອີວາໂນວິດ ກົ້ມເບິ່ງເຈ້ຍດ້ວຍຄວາມເບີກບານໃຈ:

-໑໐໐ ປູດ ຟຸ້ນຫວາ! ພິລຶກແທ້ໄດ້ມາຈັ່ງໃດລະຫນີ?

-ເຈົ້າເບິ່ງບໍ່ອອກຊັ້ນຫວະ? ຈາກຄະນະກຳມະການສະບຽງ ເກົ່າ ຄະນະກຳມະການສານ...

-ແມ່ນມັນຫມາຍຄວາມວ່າແນວໃດເກາະ? ຈັ່ງໃດຢ່າຫົວມັນ ເຫາະ...ພວກເຮົາບໍ່ສົນດອກວ່າ ມັນຕົກມາແຕ່ໃສເນາະ!

ກິນ ແມ່ນຄວາມຈຳເປັນອັນພື້ນຖານສຳລັບມະນຸດ ຍ້ອນແນວ ນີ້ບັນຫາເຄື່ອງນຸ່ງຫົ່ມສຳລັບພວກເຮົາຈຶ່ງບໍ່ເປັນບັນຫາຫນັກຫນ່ວງ ເທົ່າເລື່ອງອາຫານການກິນ. ພວກເດັກນ້ອຍນັ້ນຍາມໃດກໍຫິວສະ ເຫມີ ແລະເລື່ອງນີ້ກໍເຮັດໃຫ້ການສຶກສາອົບຮົມຂອງພວກເຮົາໃນ ເລື່ອງຈະລິຍາ ສັບສົນຂຶ້ນ. ພວກເຂົາໃຊ້ຄວາມສາມາດສ່ວນໂຕຊອກ ຫາອາຫານລ້ຽງກະເພາະໃຫ້ເຕັມໄດ້ແຕ່ຫນ້ອຍດຽວເທົ່ານັ້ນ.

ການຕົກປາແມ່ນວິທີການຕົ້ນຕໍຢ່າງຫນຶ່ງ ໃນບັນດາວິທີການຫາ ກິນສ່ວນຕົວແບບອື່ນໆ ທີ່ພວກເຂົາພາກັນປະຕິບັດຢູ່. ໃນລະດູ ຫນາວການຫາປາ ເປັນເລື່ອງລຳບາກຫລາຍເຕີບ. ວິທີການ

ອັນງ່າຍດາຍກ່ວາຫມູ່ແມ່ນການລັກກູ້ ຢາເຕີຣິ (ມອງຊະນິດຫນຶ່ງ ທີ່ເປັນຮູບຈອຍແຫລມ) ທີ່ພວກຊາວນາເອົາມາໃສ່ໄວ້ຕາມແຄມຫ້ວຍໃກ້ໆ ແລະອັນທີ່ກາງຢູ່ໃນຫນອງພວກເຮົາ. ສັນຊາດຕະຍານແຫ່ງການປົກປ້ອງຕົນເອງ ປະກອບດ້ວຍຈິດສຳນຶກປົກປ້ອງສິດຜົນປະໂຫຍດສ່ວນຕົວຂອງມະນຸດເອງ ເປັນສິ່ງກ່ວງດຶງບໍ່ໃຫ້ພວກເດັກນ້ອຍລັກເອົາເຄື່ອງຂອງອຸປະກອນເຫລົ່ານີ້ ແຕ່ແລ້ວໃນທີ່ສຸດກໍມີຜູ້ຫນຶ່ງມາລະເມີດກົດເກນປະເສີດອັນນີ້.

ຄົນຜູ້ນັ້ນກໍແມ່ນ ຕາຣາແນດ ນັ້ນເອງ. ມັນເປັນບ່າວນ້ອຍໄວ ໑໕ ປີ, ມາຈາກຄອບຄົວຂີ້ລັກ, ຮູບຮ່າງຈ່ອຍຮອງພໍດີງາມ, ໃບຫນ້າເຕັມໄປດ້ວຍຮອຍຕຸ່ມຫມາກສຸກ ແຕ່ແຈ່ມໃສມີຊີວິດຊີວາ. ມັນເປັນນັກຈັດຕັ້ງວາງແຜນທີ່ດີເດັ່ນຄົນຫນຶ່ງ, ແຕ່ບໍ່ຮູ້ຈັກນັບຖືສິດຜົນປະໂຫຍດສ່ວນໂຮມ. ມັນລັກມອງມາຈາກນ້ຳຫ້ວຍຫລາຍດາງ ແລ້ວເອົາມາເຊື່ອງໄວ້ໃນນິຄົມ. ພວກເຈົ້າຂອງມອງນຳມາຈັບໄດ້ຄາມືຄາຕີນ ເລື່ອງກໍເລີຍສຸດລົງຢ່າງຫນ້າອັບອາຍ ແລະໂດ່ງດັງພໍສົມຄວນ. ຈາກນັ້ນພວກຊາວນາກໍບໍ່ລະແສງຕາຈາກມອງຂອງພວກເຂົາ, ນັກຫາປາຂອງພວກເຮົາຈຶ່ງຫາກິນຍາກຂຶ້ນ. ຕໍ່ມາບໍ່ດົນປາກົດວ່າ ຕາຣາແນດ ກັບພັກພວກຈຳນວນຫນຶ່ງມີມອງເປັນຂອງຕົນເອງ ໂດຍອ້າງວ່າ "ຄົນຮູ້ຈັກຢູ່ໃນເມືອງ" ເອົາໃຫ້. ຍ້ອນອຸປະກອນສ່ວນຕົວອັນນີ້ ທຸລະກິດການຫາປາຈຶ່ງຂະຫຍາຍຕົວຢ່າງໄວວາ. ທຳອິດພວກເຂົາກິນປາຊຸມກັນຢູ່ໃນວົງແຄບ ແຕ່ພໍມາຮອດທ້າຍລະດູຫນາວ ດ້ວຍຄວາມເຜີເລີ ຕາຣາແນດ ກໍກ້າຮອດມາຊວນຂ້າພະເຈົ້າ

ໄປຮ່ວມວົງນຳ. ມັນເຂົ້າມາໃນຫ້ອງການຂ້າພະເຈົ້າພ້ອມດ້ວຍປາຈືນ ຈານຫນຶ່ງ.

- ຂ້ອຍເອົາປາມາໃຫ້ເຈົ້າ.

- ເຫັນແລ້ວ, ຂອບໃຈ ກັນບໍ່ກ້າກິນດອກ.

- ເປັນຫຍັງລະ?

- ເພາະວ່າເຮັດແນວນີ້ ມັນບໍ່ຍຸຕິທຳ. ຕ້ອງແຈກຢາຍປັນປາ ໃຫ້ຫມົດທຸກຄົນໄດ້ກິນນຳລະບໍ.

- ພວກເຂົາມີສຶກຫຍັງ? - ຕາຣາແນດ ຫນ້າແດງຮົ່ມຂຶ້ນດ້ວຍ ຄວາມໂມໂຫ, - ຂ້ອຍຫາມອງມາໄດ້, ຂ້ອຍຕຶກປາ ລຸຍນ້ຳຫນາວ ຊິຕາຍຜູ້ດຽວຂ້ອຍ ແລ້ວຂ້ອຍຊິຕ້ອງປັນປາໃຫ້ຫມູ່ກິນຊັ້ນຫວະ?

- ຊັ້ນເອົາປາມຶ້ງເມືອສາ ກູບໍ່ໄດ້ເຮັດຫຍັງຊ່ອຍມຶ້ງ ກູບໍ່ໄດ້ລົງນ້ຳ ນຳມຶ້ງ.

- ແຕ່ສຳລັບເຈົ້າ ແມ່ນພິເສດ.

- ບໍ່, ກູບໍ່ເອົາດອກ..., ເຮັດແນວນີ້ກູບໍ່ມັກ, ມັນບໍ່ຍຸຕິທຳ.

- ມັນມີຫຍັງບໍ່ຍຸຕິທຳເກາະ?

- ມີ ຈ້ຳຊິລະ: ມຶ້ງບໍ່ໄດ້ຊ່ວຍຫມູ່ນີ້ມາ, ແມ່ນຂອງຕ້ອນເຂົ້າ ໃຫ້ມຶ້ງແມ່ນບໍ?

- ແມ່ນຈ້ຳຊັ້ນລະ.

- ແລ້ວແມ່ນໃຜບອກມຶ້ງລະ ວ່າແມ່ນຂອງຕ້ອນສຳລັບມຶ້ງຜູ້ດຽວ ບໍ່ແມ່ນສຳລັບຫມົດທຸກຄົນ?

- ເປັນຫຍັງຊິແມ່ນຂອງຕ້ອນສຳລັບນິຄົມລະ? ແມ່ນສຳລັບ ຂ້ອຍຜູ້ດຽວນ່າ...

-ກູຄິດວ່າ ມັນແມ່ນຂອງກູນຳເວີ້ຍ, ແມ່ນຂອງທຸກຄົນໃນນິ ຄົມ ແລ້ວຫມໍ້ກະທະເດ້? ເປັນຂອງໃຜ? ຂອງນ້ຳຫວະ? ບໍ່, ແມ່ນຂອງສ່ວນລວມ, ນ້ຳມັນຈືນເດ້ ພວກສູຂໍເອົານຳເອົ້ຍລ້ຳ ແມ່ນບໍ່ລະ? ອັນນັ້ນຄືກັນ ແມ່ນຂອງກອງກາງ ຍັງພຶ້ນ ເຕົ້າໃຜ ຄູອີກ, ເຫັນບໍ່? ນ້ຳຊິວ່າແນວໃດ? ພຽງແຕ່ກູຍຶດນອງນ້ຳເທົ່ານັ້ນ ກໍຫນິດເລື່ອງເລີຍ ແຕ່ເຮັດແນວນັ້ນມັນບໍ່ງ່າມ ບໍ່ແມ່ນແນວຫມູ່ ເພື່ອນຊິເຮັດໃຫ້ກັນ, ນອງຂອງນ້ຳຫັ້ນຊິມີຫຍັງ? ແຕ່ນິດຕະພາບ ລະ! ເລື່ອງຕຶກປາຫັ້ນຫວະໃຜກໍຕຶກເປັນດອກ...

-ຕົກລົງ, -ຕາຮາແນດ ເວົ້າຂຶ້ນ, -ຈະເຮັດແນວໃດກໍໄດ້ ຕາມໃຈເຈົ້າ, ແຕ່ນອນີ້ກິນປານີ້ກ່ອນ.

ຂ້າພະເຈົ້າຮັບເອົາປາ. ນັບແຕ່ນັ້ນມາ ແຕ່ລະຄົນກໍຕຶກຜຽນກັນ ໄປຕຶກປາ ແລະເອົາປາໄປໃຫ້ເຮືອນຄົວ.

ວິທີການຊອກຫາອາຫານແບບສ່ວນຕົວອີກອັນຫນຶ່ງ ກໍແມ່ນ ການໄປຕະຫລາດໃນເມືອງ. ແຕ່ລະມື້ ການິນາ ອີວານໂນວິດ ເອົາ ນ້ຳບັກນ້ອຍຂອງພວກເຮົາທຽມໃສ່ກອງນ ແລ້ວອອກເດີນທາງສະ ແຫວງຫາອາຫານ ຫລືເລາະຊອກແຊກໄປຕາມຫ້ອງການຕ່າງໆ. ມີ ເດັກນ້ອຍສອງສາມຄົນຕິດຕາມລາວໄປ ແລະພວກນີ້ກໍໃຫ້ວ່າ ບ້ຳ ເອີນມີເລື່ອງທີ່ຈະຕ້ອງເຂົ້າໃນເມືອງສະເຫມີ ເຊັ່ນວ່າ ໄປໂຮງຫມໍ ຫລື ຖືກເອີ້ນໄປສອບສວນຢູ່ຫ້ອງການຕຳຫລວດ, ພວກເຂົາຂໍໄປ ຊ່ອຍ ການິນາ ອີວານໂນວິດ ຂັບກອງນໃນເວລາລາວຕ້ອງການ. ພວກ ເດັກນ້ອຍທີ່ວໄປເຫລົ່ານີ້ກັບຄືນມານິຄົມຢ່າງອີ່ມດີພັ້ນ ແລະ ມີອັນໃດອັນຫນຶ່ງຕິດມືມາຕ້ອນພວກຫມູ່ຂອງເຂົາສະເຫມີ. ບໍ່ເຄີຍ

ມີໃຜຖືກໄລ່ຕິດຕາມມາຈາກຕະຫລາດຈັກເທື່ອ. ເຂົ້າຂອງໄດ້ຈາກ
ການອອກຊຸດຄົ້ນເຫລົ່ານີ້ ມີທ່າທີວ່າໄດ້ມາຢ່າງຖືກຕ້ອງຕາມກົດ
ຫມາຍ ເຊັ່ນ "ປ້າຂ້ອຍເອົາໃຫ້", "ຂ້ອຍພົ້ນຮູ້ຈັກ" ແລະອື່ນໆອີກ
ຫລາຍຢ່າງ ຂ້າພະເຈົ້າບໍ່ພະຍາຍາມຈະຮ້ອງວ່າສົງສີສະແດງຄວາມ
ສົງໄສແບບໃຈດຳ ຕໍ່ສະມາຊິກຜູ້ໃດຈັກເທື່ອ ແລະຮັບຟັງທ້າຍອມ
ເຊື່ອຄຳອະທິບາຍເຫລົ່ານີ້ສະເຫມີ. ຖ້າບໍ່ເຮັດແບບນີ້ແລ້ວ ການສະ
ແດງຄວາມບໍ່ໄວ້ວາງໃຈຂອງຂ້າພະເຈົ້າ ຈະມີປະໂຫຍດຫຍັງຕໍ່ພວກ
ເຂົາ? ສຳລັບຂ້າພະເຈົ້າແລ້ວເຫັນວ່າ ພວກເດັກນ້ອຍທີ່ອຶດຫີວ
ຈ່ອຍຜອມ ກຽມພ້ອມທີ່ຈະຄຸບທຸກຢ່າງເຂົ້າປາກຢູ່ຕະຫລອດເວລາ
ແບບນີ້ ບໍ່ເຫມາະທີ່ຈະເປັນສອນທິດລອງເຜີຍແຜ່ສັ່ງສອນສິນທຳຂໍ້
ໃດໆທັ້ງນັ້ນ ໂດຍສະເພາະກ່ຽວກັບເລື່ອງຕາຍໆ ເຊັ່ນການລັກເຂົ້າ
ຫນົມໂຄ້ງຈັກອັນ ຫລືພົ້ນຮອງເກີບໂບກຈັກຄູ່ນີ້ຍັງບໍ່ສົມຄວນເລີຍ.

ຄວາມທຸກໄຮ້ຂາດເຂີນຂອງພວກເຮົາ ກໍຫາກມີດ້ານດີຢ່າງ
ຫນຶ່ງຂອງມັນຢູ່ຄືກັນ. ບໍ່ວ່າຜູ້ອຳນວຍການ ຄູສອນແລະນັກຮຽນ
ພວກເຮົາອຶດຫີວ ແລະມີຄວາມຕ້ອງການເທົ່າກັນ. ປາງນັ້ນເກືອບ
ເວົ້າໄດ້ວ່າ ພວກເຮົາບໍ່ໄດ້ຮັບເງິນເດືອນຊ້ຳ ພວກເຮົາກິນແປ້ງຊະ
ນິດດຽວກັນ ແລະເຄື່ອງນຸ່ງຫົ່ມຂອງພວກເຮົາຂາດສ້ອຍ ມີຮອຍ
ຕາບເທົ່າໆກັນກັບຂອງພວກນັກຮຽນ. ຕະຫລອດລະດູຫນາວ ເກີບ
ໂບກຂອງຂ້າພະເຈົ້າ ບໍ່ມີສົ້ນຮອງເລີຍ ຈັ່ງຊັ້ນເວລາໃດກໍມີແຕ່ ເອົາ
ເຕີຣິນາ ກຣີກໍເຮັບນາ ຜູ້ດຽວເທົ່ານັ້ນທີ່ນຸ່ງເຄື່ອງໂກ້ຈີບງາມ ຊັກ
ຮີດຢ່າງສະອາດເຫມາະສົມກັບໂຕນາງ.

ບົດທີ ๔

ປະຕິບັດການຂັ້ນພາຍໃນ

ໃນເດືອນກຸມພາ ເງິນມັດຫນຶ່ງຈຳນວນເທົ່າກັບເງິນເດືອນ ๗ ເດືອນຂອງຂ້າພະເຈົ້າຫາຍໂຕໄປຈາກລິ້ກຊັກໂຕະ.

ເວລານັ້ນ ຫ້ອງພັກຂອງຂ້າພະເຈົ້າເປັນທັງຫ້ອງການບໍລິຫານ, ຫ້ອງປະຊຸມຄູ, ຫ້ອງການເງິນ ແລະຄັງເງິນໄປໃນຕົວ ເພາະຂ້າພະເຈົ້າຮັບຫນ້າທີ່ເຫລົ່ານີ້ທັງຫມົດ. ມັດເງິນໃບໃຫມ່ອ່ອນສູນຫາຍໄປຈາກລິ້ນຊັກໂຕະທີ່ໃສ່ກຸນແຈ ຢ່າງບໍ່ມີຮ່ອງຮອຍແຫ່ງໄຜ້ອັນໃດ.

ໃນຕອນແລງ ຂ້າພະເຈົ້າເລົ່າເຫດການສູ່ພວກເດັກນ້ອຍຟັງ ແລະຮ້ອງໃຫ້ພວກເຂົາເອົາເງິນຄືນມາສົ່ງ ຍ້ອນວ່າຂ້າພະເຈົ້າບໍ່ສາມາດຫາຫລັກຖານມາອ້າງອີງວ່າ ມີການລັກຈັ່ງຊັ້ນຈຶ່ງອາດຈະຖືກຕູ່ຫາງ່າຍໆວ່າສໍ້ໂກງຍັກຍອກເງິນກອງກາງ. ພວກເຂົາຟັງຂ້າພະເຈົ້າມິດໆທ່າທາງງຽບຂຶມຈາກນັ້ນຈຶ່ງແຍກຍ້າຍກັນໄປ, ຫລັງຈາກເລີກປະຊຸມ ຂະນະທີ່ຂ້າພະເຈົ້າຍ່າງກັບເມືອເຮືອນພັກ ໂດຍຍ່າງຜ່ານເດີ່ນມິດໆນັ້ນ ກໍມີເດັກນ້ອຍສອງຄົນອອກມາລັດທາງ ພວກເຂົາຄື ຕາຣາແນດ ກັບ ກູດບ່າວນ້ອຍຜູ້ຄ່ອງໄວດີຄົນຫນຶ່ງ.

- ພວກເຮົາຮູ້ຢູ່ວ່າແມ່ນໃຜເອົາເງິນ, ຕາຣາແນດຊຸ່ມບອກ,
- ແຕ່ພວກເຮົາບໍ່ສາມາດເວົ້າອອກມາຕໍ່ຫນ້າຫມິດທຸກຄົນ ພວກເຮົາບໍ່ຮູ້ວ່າມັນເຊື່ອງເງິນໄວ້ໃສ ແລະຖ້າພວກເຮົາບອກ...ມັນຊິເອົາເງິນເປີດຫນີອາດຫລາດເລີຍ.

- ແມ່ນໃຜ?

- ກະຫມໍຫນໍ່ງ..., ຕາຮາແນດອ໊ກອັກ ແຕ່ກູດແນມເບ໋ງເຂົາ ດ້ວຍແສງຕາຊຸ່ນໆ ເບ໋ງອອກຢ່າງຈະແຈ້ງວ່າບໍ່ເຫັນພ້ອມກັບວິທີການ ຂອງຫມໍ່.

- ເວົ້າໃຫ້ເສຍນ້ຳລາຍເຮັດຫຍັງ? ຈັດການມັນໂລດນ່າ!

- ແລ້ວແມ່ນໃຜລະຊິຈັດການມັນ? ຕາຮາແນດຖາມຄືນ ຫັນໄປຫາກູດ, - ມ໋ງຫັ້ນຫວະ?...ຢາກຫ໋ວຕວ່າ ກູຢ້ານແຕ່ມັນຫັ້ນ ແລ້ວ ຊິຈັດການມ໋ງກ່ອນ.

- ບອກມາວ່າແມ່ນໃຜແລ້ວເຮົາຊິຈັດການເອງ! - ຂ້າພະເຈົ້າ ບອກພວກເຂົາ.

- ບໍ່, ບໍ່ໄດ້...

ຕາຮາແນດ ຢືນຢັນເພ໋ືອຮັກສາຄວາມລັບ ຂ້າພະເຈົ້າຍົກບ່າ ໃຫລ່ ແລ້ວເວົ້າວ່າ:

- ຕາມໃຈ ເອົາແຕ່ພວກສູເບັນ! - ຈາກນັ້ນ ຂ້າພະເຈົ້າກໍເຂົ້າ ໄປນອນ.

ໃນຕອນເຊົ້າ ກູດພົບເງິນຢູ່ໃນຄອກມ້າ ມິຄົນເອົາມັນໄປໂຍນ ເຂົ້າທາງປ່ອງຢ້ຽມ ຈ່ຳຈ້ຳໃບເງິນຈ໋ຳປ໋ອຈະຈາຍຢາຍອອກ ທ໋ວທ໋ບ ກູດສັ່ນເຊັນດ້ວຍຄວາມດີໃຈ ຟ້າວມາຫາຂ້າພະເຈົ້າໃນມ໋ືກຳເງິນໃບ ຍັບຍ໋ໍ.

ເຂົາແລ່ນຈົນອ້ອມນິຄົມທ້ັງພ້ອນລະບຳດ້ວຍຄວາມດີໃຈ ພວກ ເດັກນ້ອຍແລ່ນມາຫາຂ້າພະເຈົ້າຢູ່ໃນຫ້ອງດ້ວຍຄວາມມ່ວນໃຈ ຍ້ັງ ຄ້ົງມ໋ແຕ່ ຕາຮາແນດ ຜູ້ດງອທ໋ີ່ຍ່າງຈົນໄປມາ ເຮັດຫນ້າເບ໋ີດຊ໋ີ ອ໋ີ ຂ້າພະເຈົ້າອ໋ິດໃຈບ໋ໍ່ສ໋ົກາມທ້ັງມັນທ້ັງກູດວ່າ ພວກເຂົາເຮັດຫຍັງ ແດ່ ຫລ້ັງຈາກການໂອ້ລ໋ົມກັນໃນຕອນກາງຄ໋ືນ.

ສອງມື້ຕໍ່ມາ ມີຄົນງັດກູນແຈປະຕູຫ້ອງນັ່ງເລ່ນເຄື່ອງ ແລະລັກເອົາ ນ້ຳມັນເຄັ່ມໄປຫລາຍກິໂລ ນັ້ນມັນຫມາຍຄວາມວ່າ ອາຫານທາດ ໄຂມັນ ທັງຫມົດທີ່ພວກເຮົາມີຢູ່ເສຍໄປຫມົດກ້ຽງເລີຍ. ມັນເອົາ ຮອດຫນ່ວຍກະແຈໄປນຳ. ອີກມື້ຫນຶ່ງຫລືສອງມື້ຕໍ່ມາ, ປ່ອງຢ້ຽມ ຫ້ອງສາງກໍ່ກັງ, ເທ່ືອນີ້ເຂົ້າຫນົມອົມສຳລັບເຮັດບຸນສະຫລອງວັນ ປະຕິວັດເດືອນກຸມພາ ພ້ອມດ້ວຍ ກັບນ້ຳມັນແກລັດໃສ່ກ້ອນຈຳ ນວນຫນຶ່ງຫາຍໄປ. ນ້ຳມັນແກລັດໃສ່ກ້ອນ ນັ້ນມີຄຸນຄ່າ ສຳລັບ ພວກເຮົາເທົ່າກັບເງິນຫລ້ນຄຳ.

ກາລິນາ ອີວາໂນວິດ ຜູ້ຈ່ອຍຜອມລົງຢ່າງໄວວາ ຫ້ານຫ້ານ້ຳ ແຫ້ວຂອງລາວໄປຫາເດັກນ້ອຍເທ່ືອລະຄົນ ແລ້ວພົ່ນຄ້ວນຢາປຸກ ຈາກກອກຢາເສັ້ນຂອງລາວໃສ່ຫນ້າພວກເຂົາ, ພະຍາຍາມເວົ້າໃຫ້ ເຫດໃຫ້ຜົ່ນພວກເຂົາວ່າ:

- ພວກສູລອງຄຶດເບິ່ງແດ່ເປັນຫຍັງ? ທັງຫມົດນີ້ກໍແມ່ນຂອງ ພວກສູ. ມີໄວ້ສຳລັບພວກສູຫ້ັນຕ່ວ, ພວກຂ້ີສູດລັກຂອງຕົນເອງ, ພວກຜາກ!

ແນ່ນອນວ່າ ຕາຣາແນດ ຮູ້ເລ່ືອງເຫລ່ົານ້ີດ່ກ່ວາທຸກຄົນ ແຕ່ ມັນບ່ໍຍອມເວ້ົາຮອດພ່ໍຄວາມ, ເບ່ົາຢ່າງຫນ່ຶງຄ່ືກັບວ່າມັນມ່ີແຜນບ່ໍ ຢາກໃຫ້ເລ່ືອງຫມູ່ນ້ີແຈ່ມແຈ້ງຂ້ຶນ. ພວກເດັກນ້ອຍພາກັນເວ້ົາຮອດ ເລ່ືອງນ້ີຈົນຫນາຫູ ແຕ່ສ່ວນຫລວງຫລາຍ ເບ່ົາບັນຫາໃນກາ ນະ ວ່າເປັນເກມກ່ໍລາຢ່າງຫນ່ຶງ ພວກເຂົາບ່ໍສາມາດຮັບເອົາຄວາມເຫ້ັນທ່ີ ວ່າ ແມ່ນພວກເຂົາເອງທ່ີ່ກ່ໍກຸ້ນ.

ຂ້ ພະເຈ້ົາຮ້ອງຂ້ຶນຢ່າງໂມໂຫຢູ່ໃນຫ ໍ ພັກວ່າ:

- ພວກສູແມ່ນຫຍັງ? ແມ່ນຄົນຫລື...

- ພວກເຮົາແມ່ນນັກເລງ...! - ສຽງຫນຶ່ງສອດມາຈາກດງງແຈ ຫ້ອງສຸດ.

- ຂີ້ຕົວະ..! ພວກສູຫວະເປັນນັກເລງ?! ບໍ່ດອກ ພວກສູເປັນ ພງງຂີ້ຂະໂມຍຊັ້ນຕ່ຳລັກກັນເອງ! ບັດນີ້ສູບໍ່ມີນ້ຳມັນກິນ, ຊ່າງຫົວ ສູ...ກູບໍ່ສົນດອກ. ສຳລັບບຸນກໍບໍ່ມີເຂົ້າຫນົມ, ບໍ່ມີໃຜເອົາຫຍັງມາ ໃຫ້ພວກສູອີກດອກ. ສູຊິອຶດຕາຍກໍຢ່າສູ!

- ໂຍ້ວ ຊິໃຫ້ພວກເຮົາເຮັດແນວໃດຊັ້ນ ອານໂຕນ ເຊມືອໂນ ວິດ? ພວກເຮົາບໍ່ຮູ້ເດ ວ່າໃຜລັກ! ເຈົ້າເອງກໍຍັງບໍ່ຮູ້ ແລ້ວພວກເຮົາ ຊິຮູ້ໄດ້ແນວໃດ!

ຂ້າພະເຈົ້າຮູ້ຕັ້ງແຕ່ ເລີ່ມເວົ້າພຸ້ນແລ້ວວ່າເວົ້າໄປກໍບໍ່ມີປະໂຫຍດ. ຜູ້ລ້ຽງມືໃນຄັ້ງນີ້ແມ່ນນັກຮຽນຮຸ່ນໃຫຍ່ຄົນຫນຶ່ງເຊິ່ງທຸກຄົນເກງກົວ.

ນັ້ຕ່ມາ ຂ້າພະເຈົ້າພ້ອມດ້ວຍນັກຮຽນສອງຄົນ ອອກເດີນທາງ ໄປໃນເມືອງ ເພື່ອຊອກຫາອາຫານໃຫມ່ມາໄວ້. ວຽກງານດັ່ງກ່າວ ແກ່ຍາວຫລາຍມື້ເຕີບອັນເຮັດໃຫ້ພວກເຮົາ ຕ້ອງທຽວເຂົ້າໃນເມືອງ ທຸກໆມື້. ແລະໃນທີ່ສຸດພວກເຮົາ ຈ່ຳສາມາດໄດ້ເຄື່ອງມາພ້ອມ. ເພີ່ນເອົາຮອດເຂົ້າຫນົມອົມຈຳນວນຫນຶ່ງໃຫ້ພວກເຮົາ ຫລັງຈາກສ້ ກາມນາບຊູ່ໃຫ້ພວກເຮົາເລ່ົາເກງເຫດການ ອັນເປັນເຫດໃຫ້ພວກ ເຮົາຮັກສາສົມບັດສ່ວນກາງນ້ີ້ບໍ່ຫລ້ອນ. ໃນຕອນຄ່ຳ ພວກເຮົາໄດ້ ເລ່ົາເກງການຜະຈົນໄພຂອງພວກເຮົາ ສູ່ພວກເພ່ີນຟັງຢ່າງລະອຽດ. ໃນທ່ີສຸດ ພວກເຮົາໄດ້ນ້ຳມັນເຄ່ືອມາໃຫ້ນ່ິມ ແລ້ວເອົາໄປມ້ຽນໄວ້

ໃນຫ້ອງນັ່ງເລ່ນໃຕ້ດິນຢ່າງພາກພູມໃຈໃນຜົນງານ ແຕ່ໃນຄືນດຽວກັນນັ້ນເອງ ມັນກໍຖືກລັກໄປຫມົດ!

ຂ້າພະເຈົ້າເອງຮູ້ສຶກພໍໃຈ ໃນສະພາບການອັນນີ້ຢູ່ ໂດຍຫວັງວ່າສິດຜົນປະໂຫຍດໂຮມຫມູ່, ແນວຄິດເພື່ອສ່ວນໂຮມຈະສະແດງຕົວອອກມາ ມັນຍິ່ງເຮັ້ໃຫ້ທຸກຄົນຄຶດນຳເລື່ອງລັກຂຶ້ນມາ ແມ່ນຢູ່ວ່າພວກເດັກນ້ອຍຫມົດທຸກຄົນ ເຈັບອົກເຈັບໃຈ ແຕ່ກໍຍັງບໍ່ມີໃຜເປັນເຈົ້າການ ຫລັງຈາກຄວາມສະຖ້ຽງໃຈອັນທຳອິດຜ່ານໄປ ພວກເຂົາກໍຫັນຫນ້າມາເບິ່ງບັນຫາໃນຖານະວ່າ ມັນເປັນເກມກິລາຢ່າງຫນຶ່ງ, ຄຶດວ່າແມ່ນໃຜນໍ້ຊ່າງເກັ່ງກ້າສາມາດປານນີ້?

ສອງສາມມື້ຕໍ່ມາ, ສາຍຄໍ້ນ້ຳກໍເສຍໄປຈາກຄໍ້ນ້ຳ ຈັ່ງຊັ້ນບັດນີ້ ພວກເຮົາຈະໄປໃນເມືອງກໍໄປບໍ່ໄດ້ ພວກເຮົາຕ້ອງໄປຫາເຄາະຜັກຕູ ກຸ່ງນາບ້ານໃກ້ເຮືອນຄຽງ ເພື່ອຂໍຢືມສາຍຄໍ້ນ້ຳມາໃຊ້ຊົ່ວຄາວ.

ການລັກກາຍເປັນກິດຈະວັດປະຈຳວັນແລ້ວ, ເກືອບທຸກໆເຊົ້າໃດ ພວກເຮົາພົບວ່າມີສິ່ງໃດສິ່ງຫນຶ່ງເສຍໄປ ຈາກບ່ອນນັ່ງນຂອງ ມັນເຊັ່ນຂວານ, ເຄື່ອຍ, ກ້ວຍຊາມ, ຜ້າປູ, ອານນ້ຳ, ເຊືອກ ບ້ຳຫນວນຫລືແມ່ນແຕ່ອາຫານ. ຂ້າພະເຈົ້າພະຍາຍາມອົດນອນໃນຕອນກາງຄືນ ທ້ຳຍ່ຳງຍາມເລາະໄປມາຢູ່ໃນເດີ່ນ ພ້ອມກັບປືນສັ້ນຢູ່ໃນກ້ຳ ແຕ່ຂ້າພະເຈົ້າເຮັດໄດ້ຕ້ຳແຕ່ສອງຫລືສາມເທ່ືອເທ່ົານັ້ນ. ຄືນຫນຶ່ງ ຂ້າພະເຈົ້າໃຫ້ ໂອຊິບ ຍາມໃຫ້ ແຕ່ລາວຢ້ານຫລາຍ ຈົນຕໍ່ມາຂ້າພະເຈົ້າບໍ່ເວົ້າເລື່ອງນີ້ກັບລາວອີກ.

ຂ້າພະເຈົ້າສົງໄສເດັກນ້ອຍຢູ່ຫລາຍຄົນ, ໃນນັ້ນນັບທ້ຳງກູດກັບຕາຣາແນດນຳ. ແຕ່ເວລານັ້ນຂ້າພະເຈົ້າບໍ່ມີພະຍານຫລັກຖານໃດໆ

ສະນັ້ນຈຳຕ້ອງໄດ້ຮັກສາຂໍ້ສົງໄສນີ້ໄວ້ໃນໃຈແຕ່ພຽງຜູ້ດຽວ.

ຊາໂດຣອບ ຫົວແຮງໆແລະເວົ້າຍອກວ່າ:

-ຈັ່ງໃດ, ອາມໂຕນ ເຊມືອໂນວິດ, ເຈົ້າຄຶດວ່າ ນິຄົມແຮງງານຫນຶ່ງໆນີ້ຊິມີແຕ່ເຮັດວຽກ ບໍ່ມີເລື່ອງຕະຫລົກຫລິ້ນເລີຍຊັ້ນຫວະ? ຖ້າຈັກຫນ່ອຍກ່ອນ, ຍັງບໍ່ມີແຕ່ທໍ່ນ້ຳດອກ! ວ່າແຕ່ວ່າເຈົ້າຊິເຮັດຫຍັງໃຫ້ມັນລະ ຄັນຈັບມັນໄດ້ນະ?

-ສົ່ງມັນໄປເຂົ້າຄຸກ.

-ທໍ່ນັ້ນຫວະ? ຂ້ອຍຄຶດວ່າເຈົ້າຊິຟາດມັນບັກຄັກໆ.

ຄືນຫນຶ່ງມັນອອກມາກາງເດືອນ, ນຸ່ງເຄື່ອງຮຽບຮ້ອຍ.

-ຂ້ອຍຊິຢູ່ເປັນຫມູ່ເຈົ້າຈັກຫນ້ອຍ.

-ລະວ້າງຫົວນຶ່ງໄວ້ຕັ້ນທ້ອນ ຂ້ຶກະໂມຍຊິເອົາເລື່ອງກັບນຶ່ງ.

-ໂອ້ຍ, ພວກມັນຮູ້ແລ້ວວ່າຄືນນີ້ເຈົ້າຢູ່ຍາມ, ຈ້າງພວກມັນກໍບໍ່ອອກມາບ່າ. ຈ່ຳຊັ້ນຊິມີຫຍັງຫນ້າຢ້ານເນາະ!

-ຊາໂດຣອບ ນຶ່ງຕັ້ນກະຢ້ານວ່າແດ່! ຍອມຮັບສາດີໆ!

-ຢ້ານໃຜ? ຂ້ຶກະໂມຍຫວະ? ເປັນທຳມະດາແລ້ວ, ຂ້ອຍກໍຢ້ານມັນຢູ່ແດ່ ແຕ່ມັນບໍ່ແມ່ນເລື່ອງນ້ຶດອກ, ອາມໂຕນ ເຊມືອໂນວິດ, ເຈົ້າ ເອງກໍຮູ້ດີແມ່ນບໍ່ວ່າການຫັກຫລັງກັນນະມັນບໍ່ດີ.

-ແຕ່ມັນລັກເຄື່ອງຂອງຂອງພວກສູເອງ.

-ຂ້ອຍຫວະ? ຂ້ອຍຊິມີສ່ວນກ່ຽວຂ້ອງຫຍັງນຳ? ຂ້ອຍບໍ່ມີສິນບັດອັນໃດຈັກຢ່າງຢູ່ໃນຫນີ້.

-ແຕ່ແມ່ນບ່ອນພວກສູຢູ່ພວກສູນອນ!

-ອານໂຕນ ເຊມີວໂນວິດ! ເຈົ້າເອີ້ນວ່າບ່ອນຢູ່ຊັ້ນຫວະ? ມັນ
ບໍ່ແມ່ນບ່ອນຢູ່ອັນແທ້ຈິງຂອງຂ້ອຍດອກ. ເຈົ້າເຮັດຫຍັງບໍ່ໄດ້ດອກ
ກັບນິຄິມບ່ອນນີ້ນະ, ເຈົ້າອອກແຮງກໍ້ມລ້ຽງນັ້ນລະ. ເຈົ້າຄອງ
ເບິ່ງໂລດ, ຫລັງຈາກລັກໄປຈົນກ້ຽງແລ້ວ ພວກມັນກໍຊິພາກັນເປີດ
ຫນີຫາມິດ. ທາງທີ່ດີເຈົ້າຄວນຫາຄົນຍາມຕີ໋ງມາໄວ້ຈັກສອງຄົນ,
ເອົາປືນໃສ່ມືໃຫ້ພວກເຂົາ.

-ບໍ່, ກູບໍ່ຈ້າງຄົນຍາມ ແລະບໍ່ເອົາປືນແຈກຢາຍໃຫ້ໃຜກໍດອກ.

-ອ້າວ! ເປັນຫຍັງລະ? ຊາໂດຣອບ ອຸທານດ້ວຍຄວາມແປກ
ໃຈ.

-ເອົາພວກນີ້ມາ ກໍຕ້ອງໃຫ້ເງິນເຂົາ, ແລ້ວພວກເຮົາເອງກໍ
ທຸກຊິຕາຍຢູ່ແລ້ວ ແລະຈຸດສຳຄັນທີ່ສຸດມັນຢູ່ບ່ອນວ່າ ພວກສູຕ້ອງ
ເປັນເຈົ້າການ.

ເດັກນ້ອຍຫລາຍຄົນສະແດງຄວາມຄິດເຫັນວ່າຄວນມີຄົນຍາມ.
ບັນຫານີ້ກາຍເປັນຫົວຂໍ້ສົນທະນາກິກກ່ຽງກັນຢູ່ໃນຫ້ອນ.

ອານໂຕນ ບຣາເຊັ້ນໂກ ຜູ້ຕາງໜ້າທີ່ດີເດັ່ນຂອງຈຸທີສອງໃຫ້
ເຫດຜົນວ່າ:

-ຄັນມີຄົນຍາມ ກໍຈະບໍ່ມີໃຜມາລັກຈັກຄົນ, ເກ໋ງວ່າກ້ານີ້ຫວະ
ກະເອົາລູກເກືອ* ໃຫ້ມັນກິນຈັກຕັບຊ້າ, ຫລັງຈາກນັ້ນ ມັນຕ້ອງ
ນອນແຊ່ຢູ່ຕ່ຽງຈັກເດືອນ ແລ້ວຈ້າງມັນກໍບໍ່ກ້າມາສ່ຽງອີກ.

---

*ຄົນຍາມສ່ວນຫລວງຫລາຍ ຈະບໍ່ໃຊ້ລູກປືນອັນແທ້ຈິງ, ແຕ່
ເຂົາເຈົ້າ ຈະຍັດເກືອໃສ່ໃນສອບລູກປືນແທນລູກຊຶ່ນເມື່ອໃດຍິ໋ງກໍ
ຜິວຄົນ, ເມັດເກືອກໍຈະເຮັດໃຫ້ແສບທີ່ສຸດ, ແຕ່ວ່າບໍ່ເປັນອັນຕະ
ລາຍຕໍ່ສຸຂະພາບ.

ສ່ວນຜູ້ຄົດຄ້ານກໍມີ ໂກສເຈຍ ເວດກອບສະກີ ບ່າວນ້ອຍ ຫນ້າງາມຄົນຫນຶ່ງ ເຊິ່ງໃນສະໄຫມຍັງ "ເປັນອິດສະຫລະ" ຢູ່ຟຸ້ນ ນັນແມ່ນຜູ້ຊ່ຽວຊານຄົນຫນຶ່ງໃນດ້ານເຂົ້າຄົ້ນເຮືອນຄົນດ້ວຍເອກະສານນັ່ງດາປອມ. ໃນກໍລະນີເຊັ່ນນີ້ ນັນມີບົດບາດເປັນພຽງຕົວສໍາຮອງເທົ່ານັ້ນ ປ່ອຍບົດບາດຕົ້ນຕໍໃຫ້ແກ່ຮຸ່ນອ້າຍ. ບັນທຶກການສືບສວນ ບອກວ່າກະໂຕ ໂກສເຈຍ ເອງບໍ່ລັກຫຍັງຈັກເທື່ອ ແລະ ຄວາມສົນໃຈຂອງນັນຕໍ່ປະຕິບັດການເຫລົ່ານີ້ ກໍມີແຕ່ໃນດ້ານທິດສະດີເທົ່ານັ້ນ ນັນສະແດງຄວາມຂົ້ດແຍງດຸ້ງພວກຂົ້ລັກສະເຫມີ. ຂ້າພະເຈົ້າສັງເກດເຫັນນິໄສທາດແທ້ຄ່ວນຄົນ ແລະສັບສົນຂອງນັນໄດ້ດົນນານແລ້ວ. ອັນທີ່ຂ້າພະເຈົ້າປະຫລາດໃຈກ່ວາຫມູ່ກໍແມ່ນເລື່ອງທີ່ນັນສາມາດເຂົ້າແກບເຂົ້າເກຍກັບພວກຫມູ່ຄູ່ ທີ່ຫ້ວນໆນັ້ນ ໄດ້ເປັນຢ່າງດີ ແລະການມີອິດທິພົນຂອງນັນຢ່າງກວ້າງຂວາງຕໍ່ນັນຫາການເມືອງ. ໂກສເຈຍ ສະຫລັບສະຫນຸນທັດສະນະນີ້ວ່າ:

-ອານໂຕນ ເຊມືອໂນວ໌ ເວົ້າຖືກແລ້ວ, ຢູ່ຫນີ້ບໍ່ຕ້ອງການຄົນຍາມ! ດຽວນີ້ພວກເຮົາບໍ່ເຂົ້າໃຈລາວ ແຕ່ບໍ່ດົນດອກ ພວກເຮົາທຸກຄົນຈະເຂົ້າໃຈດີເອງວ່າ ເປັນຫຍັງຈຶ່ງບໍ່ຄວນລັກເຄື່ອງຢູ່ໃນນິຄົມ ດຽວນີ້ກໍມີຫລາຍຄົນເຂົ້າໃຈແດ່ແລ້ວ ແລະຈັກຫນ້ອຍ ພວກເຮົາຈະເປັນຜູ້ເຝົ້າຍາມເອງແມ່ນບໍ່ ບູຮູນ? ນັນເວົ້າສຸດກໍເອົ້ນໃສ່ ບູຮູນ ຢ່າງບໍ່ຄາດຝັນ.

-ໂຍ້ວ ຄັນວ່າຕ້ອງການຄົນຍາມ ພວກເຮົາກໍຈັດການໂລດແຫລ້ວ! -ບູຮູນ ຕອບ.

ໃນເດືອນກຸມພາ ແມ່ເຖົ້ານາຍບັນຊີຂອງພວກເຮົາ ກໍອອກຈາກ

ຫນ້າທີ່ຢູ່ນິຄົມ ຂ້າພະເຈົ້າຊອກບ່ອນເຮັດການໃຫ້ລາວຢູ່ໃນໂຮງ
ຫມໍແຫ່ງຫນຶ່ງໄດ້ແລ້ວ, ໃນວັນອາທິດຫນຶ່ງ ພວກເຮົາຈູງ "ບັກ
ນ້ອຍ" ໄປກ້ອງເກີຍຊານ ຫ້ອງພັກຂອງລາວ ຈາກນັ້ນ ພວກສະ
ມາຊິກຂອງລາວ ກັບພວກຮ່ວມກິນນ້ຳຊາພັ້ງບັດຊະຍາຊີວິດນຳລາວ
ທຸກຄົນ ກໍຊ່ອຍຂົນເຄື່ອງຫີບຫໍ່ກ໋ຽງຕ່າງໆຈຳນວນນັບບໍ່ໄຄ່ວ່ລ້ຽມ
ໃສ່ກວນ. ແມ່ເກ້ົາໃຈດີ ນັ່ງໂຫ້ຍໄປໂຫ້ຍມາຢູ່ເທິງຫີບສົມບັດ
ຂອງລາວຢ່າງສະບາຍໃຈ, ລາວອອກເດີນທາງໄປສູ່ການດຳລົງຊີວິດ
ແບບໃຫມ່ ດ້ວຍພາຫານະທີ່ເຄື່ອນໄປດ້ວຍຄວາມໄວຕາມປົກກະຕິ
ຄື ๔ ກ.ລ.ມ ຕໍ່ຊົ່ວໂມງ.

ແຕ່ "ບັກນ້ອຍ" ໄດ້ກັບຄືນມາໃນຕອນເດິກພ້ອມດ້ວຍແມ່ເກ້ົາ
ເຊ່ົາພໍແຕ່ກ້າວເຂ້ົາມາໃນຫ້ອງຂອງຂ້າພະເຈົ້າທ່ໍນັ້ນ ກໍຮ້ອງໄຫ້ສະ
ອ໊ກສະອ໊ຶ້ນ: ເຄື່ອງຂອງຂອງລາວ ກ໊ືກລັກຈົນກ້ັງ! ພັກພວກຂອງ
ລາວກັບຜູ້ຊ່ວຍສ່ອນຫລວງຫລາຍ ບໍ່ພຽງແຕ່ຂົນຫີບຫໍ່ກ໋ຽງຕ່າງໆ
ຂອງລາວໄປໃສ່ກວນເທ່ົານັ້ນ ແຕ່ພວກເຂົາຍັງຂົນໄປມ້ຽນບ່ອນ
ອ໊ຶ່ນນຳ. ມ້ັນແມ່ນເລ໊ືອງລັກຂະໂມຍຢ່າງຫນ໊ຶ່ງ. ຂ້າພະເຈົ້າ ປຸກ ກາ
ລິນາ ອິວາໂນວິດ, ຊາໂດຣອບ, ດາຣາແນດ ທັນທີ ແລະຈາກ
ນັ້ນ ພວກເຮົາກ໊ໍ່ຮຸ໊້ນເກ໊ືອບທຸກໆບ່ອນຢູ່ໃນນິຄົມ. ພວກເຂົາລັກ
ເຄື່ອງໄດ້ຫລາຍໆຈົນບໍ່ມ໊ີເວລາເອ໊ົາໄປເຊ໊ືອງໄວ້ບ່ອນຄ໊ັກໆ. ສົມບັດ
ທ້ັງຫມ໊ົດຂອງແມ່ເກ້ົານາຍບ້ັນຊ໊ີ ກ໊ືກເຊ໊ືອງຊ້ອນຢູ່ໃນພຸ່ມໄມ້, ດ້ານ
ຂ້າວຂ໊ຶ່ໂຮງລ໊ົດ, ກ້ອງຂ້ັນໄດ ຫ໊ລ໊ືແມ່ນແຕ່ກ້ອງດ້ານລຸ່່ມ ແລະທ້ານ
ຫລ້ັງຕູ້. ແມ່ເກ້ົານ໊ັ່ງມ໊ືແທ້ໆ; ພວກເຮົາຄ໊ົ້ນຜ້ານ ປູບ່ອນໃຫມ່ໄດ້ຕ໊ັ້ງ
ໂຫລ, ຜ້ານ ປອກຫມອນ ແລະຜ້ານ ເຊ໊ັດໂຕ, ບ່ອງເງ໊ິນກັບເຕ໊ົ້ກອກ

ໄມ້ນ້ອຍຈຳນວນຫນຶ່ງ, ສາຍແຂນ, ຕຸ້ມຫູຫລາຍກ່ຳ ແລະເຄື່ອງ ຍິບຍ່ອຍຕ່າງໆອີກຕັ້ງຫລວງຫລາຍ.

ລາວນັ່ງໄຫ້ຢູ່ໃນຫ້ອງຂອງຂ້າພະເຈົ້າ ເຊົ່າຕໍ່ມາພວກມິດສະຫາຍ ເກົ່າຂອງລາວຄືເດັກນ້ອຍເກເລທີ່ຖືກຈັບໄດ້ຄ່ອຍໆເຂົ້າມາຈົນເຕັມ.

ທຳອິດ ພວກເຂົາພາກັນປະຕິເສດ ແຕ່ເມື່ອຂ້າພະເຈົ້າ ຮ້ອງ ຮ້າຍຂຶ້ນ ພວກເຂົາຈຶ່ງຍ້ານ ແລະຍອມຮັບສາລະພາບ, ຄະດີຈະແຈ້ງ ຂຶ້ນ. ພວກມິດສະຫາຍຂອງແມ່ເກົ້າເອງນັ້ນ ບໍ່ໄດ້ແມ່ນຜູ້ລົງມືຕົ້ນຕໍ ດອກ, ພວກເຂົາພໍອົກພໍໃຈນຳຂອງທີ່ລະນຶກ ເລັກນ້ອຍໆເຊັ່ນຜ້າ ເຊັດມືຈັກຜືນ ຫລືປຸກນ້ຳຕານຈັກອັນເທົ່ານັ້ນ. ປາກົດວ່າຜູ້ຈັດການ ທຸກສິ່ງທຸກຢ່າງໃນເລື່ອງນີ້ແມ່ນ ບູຮູນ. ນັບວ່າເປັນການເປີດເຜີຍ ຄວາມລັບທີ່ຫນ້າປະຫລາດໃຈສຳລັບຫລາຍຄົນ ແລະໂດຍສະເພາະ ແມ່ນສຳລັບຂ້າພະເຈົ້າເອງ. ນັບແຕ່ມາຮອດໃຫມ່ໆພຸ້ນແລ້ວ, ບູຮູນ ຄືວ່າ ເປັນຄົນດີໃນກ່ວາຫມູ່, ທ່າທີເຄົ່ງຂຶມສະເຫມີ, ເຂົ້າມີຫ້ວງ ທ່າທີຈິງຈັງ ແລະຫນ້າຄົບຄ້າສະມາຄົມຢູ່ໃນຕົວ, ເປັນຜູ້ຖຸຫມັ້ນ ໃນການຮ່ຳຮຽນຫລາຍກ່ວາຫມູ່ ອັນເປັນສິ່ງສະແດງເຖິງຄວາມເອົາ ໃຈໃສ່, ຄວາມສົນໃຈຫ້າວຫັນຕໍ່ວຽກງານ. ຄວາມສາມາດແລະ ຄວາມກ້ຳກ້ອນໃນການລົງມືໃນເທື່ອນີ້ຂອງມັນ ເຮັດໃຫ້ຂ້າພະເຈົ້າຄໍ ແງ້ນໄປ: ມັນເອົາເຄື່ອງຂອງແມ່ເກົ້າທີ່ຍັງເປັນຫໍ່ຢູ່ແທ້ໆໄປເຊື່ອງ ໄວ້. ແນ່ນອນແລ້ວ ການລັກໃນຄັ້ງກ່ອນໆຢູ່ໃນນິຄົມຂອງພວກເຮົາ ນັ້ນກໍແມ່ນຝີມືຂອງມັນ.

ໃນທີ່ສຸດ ຂ້າພະເຈົ້າກໍຄົ້ນຄົ້ນມາເຖິງຮາກເຫງົ້າອັນແທ້ຈິງຂອງ ຄວາມຊົ່ວຮ້າຍອັນນີ້! ຂ້າພະເຈົ້າຈັດແຈງເອົາ ບູຮູນ ມາປາກົດຕົວ

ຕໍ່ຫນ້າສານປະຊາຊົນ, ນັບວ່າເປັນການຕັດສິນຄະດີເທື່ອທຳອິດຢູ່ ໃນປະຫວັດສາດຂອງນິຄົມພວກເຮົາ.

ພວກໄອຍະການຫນ້າແຫລ້ກຳເປົ໊ອນເປ ໃສ່ເສື້ອຜ້າຂາດລ້ອຍ ນັ່ງປະຈຳບ່ອນຢູ່ເທິງຕຽງແລະໂຕະ ພາຍໃນຫໍພັກ. ຕະກຽງນ້ຳມັນ ສ່ອງແສງກະທົບໃບຫນ້າຫງ່ອມເຫງົາເຈັບແຄ້ນຂອງພວກເດັກນ້ອຍ ແລະໃບຫນ້າເມັ່ນຈືດຂອງ ບູຮູນ ເຊິ່ງເປັນຄົນຕຸ້ຍຕຶດ ແລະຄໍ້ສັ້ນໆ ລັກສະນະຄືນັກເລງອາເມລິກາ.

ດ້ວຍນ້ຳສຽງຮ້າຍໆແຕ່ຫນັກແຫນ້ນແຈ່ມແຈ້ງຂ້າພະເຈົ້າພັນລະ ນາເຖິງໂທດກຳອັນນີ້ ສູ່ພວກເດັກນ້ອຍຟັງ: ລັກເຄື່ອງຂອງແມ່ຍິງ ເກົ້າໆຜູ້ຫນຶ່ງ ເຊິ່ງມີຄວາມສຸກຢູ່ນຳຜ້າແພຂອງໃຊ້ຕາຍໆເຫລົ່ານີ້, ລັກເອົາເຄື່ອງລາວຈົນກ້ຽງ. ທັງໆທີ່ວ່າລາວເປັນຜູ້ມີໃຈເມດຕາອາລີ ເພື່ອແພ່ຕໍ່ພວກສູກ່ວາທຸກໆຄົນຢູ່ໃນນິຄົມ, ແລະທັງເປັນຜູ້ຊ່ວຍ ເຫລືອເກື້ອກູນພວກສູ; ເຮັດແນວນີ້ ບໍ່ແມ່ນຄົນອື່ກແລ້ວ, ເປັນ ສັດເດຍລະສານຊົ້ນຕ່ຳໆພຸ້ນແຫລະ. ຄົນເຮົາຕ້ອງຮູ້ຈັກຮັກສາກຽດ ຂອງຕົນ, ຕ້ອງສະແດງຕົນເປັນຜູ້ເຂັ້ມແຂງ, ທະນົງຕົວ ແລະບໍ່ ແຕະຕ້ອງແມ່ນແຕ່ຜ້າຂາດຕ່ອນສຸດທ້າຍຂອງແມ່ຍິງເກົ້າໆຜູ້ຫນ້າສົງ ສານ.

ເຖິງແມ່ນວ່າ ຄຳປາໄສຂອງຂ້າພະເຈົ້າກະທົບຫົວໃຈຂອງພວກ ເຂົາຮຸນແຮງເຕີບ ຫລືວ່າພວກເດັກນ້ອຍເອງ ກໍໂມໂຫຂຶ້ນພໍແຮງ ແລ້ວກໍຕາມ ແຕ່ບູຮູນ ໄດ້ກາຍເປັນເປົ້າຫມາຍໂຈມຕີອັນດຽວເສຍ ແລ້ວ. ບັກນ້ອຍ ບຣາເຊັນໂກ ຜົມຫຍຸ້ງ ເດ່ມືຊີຫນ້າ ບູຮູນ ທັງ ສອງມື.

- ຈັ່ງໃດ? ມຶງຊິວ່າແນວໃດບັດນີ້ນະ? ຕ້ອງສົ່ງມຶງໄປຢູ່ໃນຄຸກຂີ້ ໄກ່ພຸ້ນລະ ແມ່ນມຶງນີ້ນໍ້ທີ່ເຮັດໃຫ້ພວກກູຫົວໄສ້ຊິຂາດ ເລ້ວກະ ແມ່ນມຶງນີ້ເອງ ທີ່ລັກເງິນຂອງ ອານໂຕນ ເຊມີວໂນວິດ.

ບູຮູນ ຟ້າວປະຕິເສດທັນທີ:

- ກູຫວະ ເອົາເງິນຂອງ ອານໂຕນ ເຊມີວໂນວິດ? ມີຫລັກ ຖານຫຍັງ?

- ກູຊິຫາຫລັກຖານມາດອກ ມຶງບໍ່ຕ້ອງຢ້ານ!

- ເຊີນເລີຍ.

- ມຶງວ່າມຶງບໍ່ໄດ້ເອົາວ່າຕິ? ບໍ່ແມ່ນມຶງຫວະ?

- ເລ້ວເປັນຫຍັງຈົ່ງຊິແມ່ນກູລະ?

- ແມ່ນມຶງຫັ້ນແລ້ວ!

- ກູເອົາເງິນຂອງ ອານໂຕນ ເຊມີວໂນວິດ? ແມ່ນໃຜເປັນພະ ຍານໄດ້?

ສຽງຂອງ ຕາຣາແນດ ດັງສອດຂຶ້ນທາງຫລັງຂອງມັນ.

- ກູເອງເວ້ີຍ!

ບູຮູນ ມິດໄປ, ຫັນໄປຫາ ຕາຣາແນດ, ມັນຢາກເວົ້າອັນໃດ ອັນຫນຶ່ງ ແຕ່ເລ້ວກໍປ່ຽນໃຈ, ເອົາມືແກວ່ງໄປແລ້ວເວົ້າວ່າ:

- ເອ້ົາ, ວ່າຈັ່ງຊັ້ນກະວ່າ, ແມ່ນກູສາ ແຕ່ກູກະເອົາສິ່ງເລ້ວບໍ່ ແມ່ນຫວະ?

ພວກເດັກນ້ອຍ ພາກັນຫົວຂຶ້ນໂຄບໆຢ່າງບໍ່ຄາດຄິດມາກ່ອນ. ພວກເຂົາເຫັນວ່າການກົກກ່ຽງແບບນີ້ມ່ວນດີ. ຕາຣາແນດ ກາຍ ເປັນພະເອກ, ເຂົ້າກ້າວອອກມາຢືນທາງຫນ້າ.

- ແຕ່ວ່າຢ່າໄລ່ມັນຫນີເທາະ, ພວກເຮົາແຕ່ລະຄົນກໍມີຈຸດອ່ອນນໍາກັນຫັ້ນລະແມ່ນບໍ? ຟາດມັນຄັກໆຈັກບາດ ໃຜໆກໍຄົງບໍ່ຂັດຂ້ອງດອກ.

ຫນິດທຸກຄົນມິດອິນສົ້ນ. ບູຮູນ ເສືອດຕາເບິ່ງໃບຫນ້າລາຍໆ ຂອງ ຕາຮາແນດ.

- ຈ້າງເທາະແມ້, ນຶ່ງບໍ່ມີທາງຊິຕ້ອງກູໄດ້ດອກ. ນຶ່ງອ້າງເກັ່ງຫຍັງຈົ່ມາສະແດງແທ້? ບໍ່ມີທາງວ່ານຶ່ງຊິເປັນຜູ້ອໍານວຍການນິຄົມດອກເດ້. ອານໂຕນ ອາດຊິຕີກູໄດ້ ກ້າວ່າຈໍາເປັນແຕ່ນຶ່ງຫວະ, ນຶ່ງ ບໍ່ກ່ວເວ້ີຍ!

ເວັດກອບສະກີ ເຕັ້ນຂຶ້ນກັບບ່ອນ:

- ບໍ່ກ່ວກັບພວກເຮົາວ່າຕີ? ເຮ້ີຍສູ ເລື່ອງນ້ີມັນບໍ່ກ່ວກັບພວກເຮົາຫວະ?

- ກ່ວເວ້ີຍ! - ພວກເດັກນ້ອຍອື່ນໆຮ້ອງຂຶ້ນ. - ພວກເຮົາຈັດການກັບມັນເອງເວ້ີຍ, ເຮັດຄັກໆກ່ວາ ອານໂຕນ ເຊມືອໂນວິດ ພຸ້ນລະ!

ຜູ້ໃດຜູ້ຫນຶ່ງ ໂດດອອກມາໃສ່ ບູຮູນແລ້ວ, ບຮາເຊັນໂກ ກໍາ ກໍາປັ້ນແນໃສ່ຊື່ຫນ້າມັນ ທ້ັງກັດແຂ້ວວ່າ:

- ຕ້ອງຂ້ຽນນຶ່ງ...ຮຶ! ຂ້ຽນຢ່າງຄັກໆ!

ຊາໂດຣອບ ຊຸ່ມໃສ່ຫູຂ້າພະເຈ້ົ້າວ່າ:

- ເຈ້ົ້າເອົາມັນອອກໄປສາ ບໍ່ຊັ້ນພວກເຂົາຊິເອົາມັນຫມອບໃດ ຫັ້ນ.

ຂ້າພະເຈ້ົ້າດຶງບຮາເຊັນໂກ ອອກຈາກ ບູຮູນ: ຊາໂດຣອບ ເອງ

ກໍດັນເດັກນ້ອຍອີກສອງສາມຄົນໃຫ້ກອຍຄືນໄປທາງຫລັງ. ພວກເຮົາລະງັບຄວາມໄດ້ຢ່າງຍາກລຳ.

ບຮາເຊັນໂກ ຮ້ອງຂຶ້ນວ່າ:

-ໃຫ້ບັກ ບູຮູນ ເວົ້າ! ຕ້ອງໃຫ້ມັນສາລະພາບ!

ບູຮູນ ກົ້ມຫົວລົງ:

-ກູບໍ່ມີຫຍັງຊິເວົ້າ. ພວກສູເວົ້າກຶກຫມົດແລ້ວ. ປ່ອຍກູໄວ້ກັບ ອານໂຕນ ເຊມີອໂນວິດ ຜູ້ດຽວ, ໃຫ້ລາວທຳໂທດກູ ຕາມລາວເຫັນສົມຄວນ.

ທຸກຢ່າງງຽບສະຫງັດລົງ. ຂ້າພະເຈົ້າຍ່າງກົ່ງໄປທາງປະຕູ ດ້ວຍຄວາມຢ້ານວ່າໂຕເອງຈະປ່ອຍໃຫ້ຄວາມໂມໂຫທີ່ຟົດເດືອດຢູ່ໃນໂຕ ຫລຸລົ້ນອອກມາພາຍນອກໃນຮູບຮຸນແຮງ. ພວກເດັກນ້ອຍໂດດຫລີກໄປທາງຂ້າງເພື່ອປ່ອຍໃຫ້ຂ້າພະເຈົ້າກັບ ບູຮູນອອກມາ.

ພວກເຮົາຍ່າງຜ່ານເດີ່ນທີ່ມືດດຳອອກມາມຶດໆ ໂດຍເລືອກໄປຕາມປ່ອງບໍ່ມີຫີມະ. ຂ້າພະເຈົ້າຍ່າງອອກຫນ້າ, ມັນຍ່າງນຳຫລັງ.

ຄວາມຮູ້ສຶກເບື່ອຫນ່າຍຫນ້າອະເຫຍື່ອງຢ່າງຫນັກແລ່ນຂຶ້ນຄອບງຳທົ່ວວິນຍານຂອງຂ້າພະເຈົ້າ. ຂ້າພະເຈົ້າເຫັນມັນເປັນຄົນສຸດທ້າຍ ນຸດຕ່ອນສຸດທ້າຍ, ຈົນບໍ່ຮູ້ວ່າຈະເຮັດກັບມັນແນວໃດ. ມັນຖືກສົ່ງມາຍັງນິຄົມ ຍ້ອນວ່າມີຄະດີຮ່ວມກັບກຸ່ມຂົ້ກະໂມຍເຊິ່ງມີສະມາຊິກອາຍຸແກ່ຫລາຍຄົນ ຖືກຍິງເປົ້າກົ້ມແລ້ວ. ມັນເອງມີອາຍຸ ດາ ປີ.

ບູຮູນ ຢືນຢູ່ໃກ້ໆປະຕູ, ບໍ່ປາກບໍ່ເວົ້າຫຍັງຫມົດ. ຂ້າພະເຈົ້ານັ່ງລົງຕັ່ງອີ້ເຮັດວຽກ, ພະຍາຍາມອົດທົນບໍ່ເອົາອັນໃດອັນຫນຶ່ງແຂວງຟາດໃສ່ໂຕມັນເພື່ອໃຫ້ການໂອ້ລົມຍຸຕິລົງ.

ໃນທີ່ສຸດ ບູຮູນ ກໍເງີຍຫົວຂຶ້ນ ແລະເວົ້າຊ້າໆ, ມັນເນັ້ນທຸກໆ ຄ້ອຍຄຳທ້າອິດກັ້ນກ້ອນສະອື້ນໄວ້ຢ່າງຍາກລຳ:

-ຂ້ອຍ...ຂ້ອຍ...ຊິບໍ່ລັກອີກ...ຈັກເທື່ອ.

-ນ້ຶງຕິວະຫັ້ນ! ນ້ຶງເຄີຍເວົ້າແນວນີ້ມາແລ້ວກັບຄະນະກຳມະ ການ.

-ອັນນັ້ນແມ່ນກັບຄະນະກຳມະການ ແຕ່ບັດນີ້ ຂ້ອຍເວົ້າກັບ ເຈົ້າ! ລົງໂທດຂ້ອຍຕາມແຕ່ເຈົ້າເຫັນສົມຄວນ ແຕ່ຢ່າໄລ່ຂ້ອຍຫນີ ຈາກນິຄົມເລີຍ.

-ແລ້ວນ້ຶງມັກອອນຊອນບ່ອນໃດຂອງນິຄົມລະ?

-ຂ້ອຍມັກບ່ອນຫນີ້, ນ້ອງກເຮັດ, ຂ້ອຍຢາກຮຽນຫນັງສື. ທີ່ ຂ້ອຍລັກນັ້ນກໍຍ້ອນວ່າຂ້ອຍຫິວເລ້ຍໆດອກ.

-ດີແລ້ວ, ນ້ຶງຢູ່ໃນຫ້ອງຂັງອັດກະແຈ ສາມມື້, ໄດ້ກິນແຕ່ ເຂົ້າຈີ່ກຳກັບນ້ຳລ້າເທົ່ານັ້ນແລະກະຢ່າໄປແຕະຕ້ອງ ຕາຣາແມດ ເດ້!

-ເຈົ້າ.

ບູຮູນ ຂັງໂຕເອງຢູ່ໃນຫ້ອງນ້ອຍຕິດໆກັບຫ້ໍພັກ ເຊິ່ງແຕ່ກ່ອນ ເປັນຫ້ອງຜູ້ຄວບຄຸມນັກຮຽນຂອງນິຄົມເກົ່າຮອດສາມມື້ເຕັມໆ. ຂ້າ ພະເຈົ້າບໍ່ໃສ່ກຸນແຈຫ້ອງມັນ ເພາະມັນໄດ້ໃຫ້ຄຳຫມັ້ນສັນຍາວ່າຈະ ບໍ່ອອກຈາກຫ້ອງໂດຍທີ່ຂ້າພະເຈົ້າບໍ່ໄດ້ໃຫ້ອະນຸຍາດ. ໃນມື້ທຳອິດ ນັ້ນ ຂ້າພະຈົ້າ ໄດ້ສົ່ງແຕ່ເຂົ້າຈີ່ກັບນ້ຳລ້າໃຫ້ມັນອີ່ຫລີ. ແຕ່ມາຮອດ ມື້ທີສອງ ຂ້າພະເຈົ້າຊ້ຳດູຕົນມັນ ແລະສົ່ງອາຫານໄປໃຫ້ມັນ. ບູຮູນ ທຳທ່າວ່າຈະປະຕິເສດຢ່າງທະນົງຕົວ ແຕ່ຂ້າພະເຈົ້າຮ້ອງໃສ່ມັນວ່າ:

-ບັກເວນນ້ຶງ, ຍັງຊິມາງອນເອົາທ່າຢູ່ຊັ້ນຫວະ!

ມັນຍິ້ມ, ສັ່ນບ່າໄຫລ່ຍົກ ຈາກນັ້ນກໍຄ້ວາຈັບບ່ວງ.

ບູຮູນ ກຶຄຳເວົ້າຂອງມັນ: ມັນບໍ່ລັກຫຍັງອີກຈັກເທື່ອ ບໍ່ວ່າຢູ່ໃນນິຄົມ ຫລືຢູ່ທາງນອກ.

ບົດທີ ๕

ກິດຈະການຂອງລັດ

ຂະນະທີ່ພວກເດັກນ້ອຍ ຍັງມີຄວາມຮູ້ສຶກເສີຍເມີຍຕໍ່ສິນບັດຂອງນິຄົມນັ້ນ ມັນຈຳເກີດມີພະລັງແຮງພາຍນອກຢ່າງຫນຶ່ງທີ່ດຶງດູດຄວາມສົນໃຈອັນໃຫຍ່ຫລວງຂອງພວກເຮົາ.

ພະລັງຕົ້ນຕໍເຫລົ່ານີ້ມີກະຈັດກະຈາຍ ຢູ່ຕາມແຄມກະຫນົນໃຫຍ່ ໄປ ຄາຄົບ ນັ້ນເອງ. ຢູ່ບົນກະຫນົນເສັ້ນນີ້ ເກືອບວ່າບໍ່ມີຄົນໃດເລີຍທີ່ຈະບໍ່ມີຄົນຖືກປຸ້ນຖືກຈີ້. ຂະບວນກວນຂອງຊາວບ້ານຫມົດຂະບວນຕ້ອງຢຸດເດີນທາງ ຍ້ອນສຽງປືນຍິງຈາກປືນຍາວດ້ານລູກ; ຈາກນັ້ນ ໂດຍບໍ່ເສຍເວລາເວົ້າຫຍັງຈັກຄວາມ ພວກໂຈນໂດດເຂົ້າໄປຫາພວກແມ່ຍິງທີ່ນັ່ງຢູ່ໃນກວນເອົາມືເບື້ອງບໍ່ກໍ່ອາວຸດຈີກຄົ້ນເຂົ້າໄປໃນເອິກໃນແອວພວກນາງ ຂະນະທີ່ພວກຜົວເຊົ່ງຕົກໃຈເຮັດຫຍັງບໍ່ເປັນໄດ້ແຕ່ເອົາຜ້າຫົ່ມແສ້ຟາດໃສ່ປອກເກັບໂບກຕົນເອງໄປມາ ແລະຈົ່ມຢ່າງອັບອາຍຂາຍຫນ້າວ່າ: "ໃຜຊິຄຶດຈັກດີ! ພວກເຮົາເອົາເງິນເຊື່ອງໄວ້ບ່ອນລັກທີ່ສຸດແລ້ວນ່າ...ເອົາໄວ້ໃນສົ້ນເສື້ອແມ່ຍິງ ແລ້ວເບິ່ງແມ້ພວກເຂົາໂລດໄປຈັກເອົາໂລດ".

ການປຸ້ນຈີ້ເປັນຂະບວນແບບນີ້ບໍ່ຮ້າຍແຮງເກີ່ງຂັ້ນ "ເລືອກຕົກຢ່າງອອກ" ຈັກເທື່ອດອກ, ເມື່ອໄດ້ສະຕິ ພວກພໍ່ເຮືອນເຊົ່ງກຶກ

ພວກໂຈນບັງຄັບໃຫ້ຢຸດຢູ່ກັບທີ່ຊ່ວໄລຍະຫນຶ່ງນັ້ນກໍມາຍັງນິຄົມຂອງ
ພວກເຮົາ ເພື່ອເລົ່າເຖິງເຫດການຢ່າງຕື່ນເຕັ້ນ. ຂ້າພະເຈົ້າເຕົ້າ
ໂຮມສະຫມັກພັກພວກຈໍານວນຫນຶ່ງ, ກໍເອົາຫລັກຮ້ອເປັນອາວຸດ
ສ່ວນຂ້າພະເຈົ້າກໍປືນສັ້ນຈາກນັ້ນ ພວກເຮົາຈຶ່ງອອກມາຍັງກະຫນິນ
ໃຫຍ່ ແລະຊອກຫາດົ້ນຢູ່ໃນປ່າຕັ້ງດົນນານ. ເທົ່າທີ່ຜ່ານມາ,
ພວກເຮົາປະສົບຄວາມສໍາເລັດແຕ່ເທື່ອດຽວເທົ່ານັ້ນ ຄືຫ່າງຈາກກະ
ຫນິນໄປປະມານ ๕๐๐ ແມັດ, ພວກເຮົາໄດ້ພົບຄົນກຸ່ມຫນຶ່ງທີ່ລີ້
ຊ່ອນຢູ່ໃນກອງຫີນກາງປ່າ. ພວກເຂົາຍິງໂຕ້ຕອບສວ່ງຮ້ອງໂຮຂອງ
ເດັກນ້ອຍດ້ວຍການຍິງປືນບາດຫນຶ່ງ ຈາກນັ້ນ ຈຶ່ງແຕກສະພັດສະ
ພ່າຍໄປຄົນລະທິດລະທາງ ແຕ່ພວກເຮົາສາມາດຈັບໄດ້ຜູ້ຫນຶ່ງ ແລ້ວ
ເອົາມານິຄົມນໍາ. ມັນບໍ່ມີຫຍັງຕິດຕົວເລີຍ ບໍ່ວ່າປືນຍາວ ຫລືຂອງ
ລັກໄດ້ແນວອື່ນໆ ມັນປະຕິເສດ ຂໍ້ຕູ່ຫາທຸກຢ່າງແບບດັດດ່ງອ ແຕ່
ປານນັ້ນ ເມື່ອພວກເຮົາສົ່ງມັນໃຫ້ຕໍາຫລວດຍຸຕິທໍາ ຊໍ້າປາກົດວ່າ
ມັນແມ່ນນາຍໂຈນໂດ່ງດັງຜູ້ຫນຶ່ງ ຈັ່ງຊັ້ນຕໍ່ມາ ສາຍໂຈນທັງຫມົດກໍ
ຖືກຈັບ. ກ່ຽວກັບເລື່ອງນີ້ ຄະນະກໍາມະການບໍລິຫານງານເຂດ ໂປນ
ຕາວ ໄດ້ຂອບອົກຂອບໃຈນິຄົມກ້ອກກີຢ່າງໃຫຍ່ຫລວງ.

ແຕ່ການລັດປຸ້ນຕາມກະຫນິນໃຫຍ່ຍັງບໍ່ຫມົດໄປເລີຍ ໃນຕອນ
ທ້າຍຂອງລະດູຫນາວ ພວກເດັກນ້ອຍເລີ່ມພົບເຫັນຮ່ອງຮອຍ ເຫດ
ການຮ້າຍແຮງທີ່ເກີດຂຶ້ນໃນຕອນກາງຄືນ. ເທື່ອຫນຶ່ງຢູ່ບໍ່ຢູ່ ພວກ
ເຮົາເຫັນມີເບື້ອງຫນຶ່ງເດ່ພົ້ນຂຶ້ນຈາກກອງຫີນລະຫວ່າງຕົ້ນແປກ.
ເມື່ອຂຸດລົງກໍພົບວ່າ ມີຊາກສົບແມ່ຍິງຄົນຫນຶ່ງ, ນາງຖືກຍິງຢູ່ຫນ້າ

ພາກ. ໃນພຸ່ມໄມ້ໃກ້ໆກະຫນີນອີກບ່ອນຫນຶ່ງມີຊາກສົບຄົນຂັບກວ່ນ ຫົວກຶກຜ່າເຄິ່ງ. ເຊົ້າມື້ຫນຶ່ງພໍຕື່ນນອນຕາຂຶ້ນມາ ພວກເຮົາເຫັນ ຫຍັງວ່າດີ? ມີຊາກສົບຫ້ອຍຕ້ອງແຕ້ງຢູ່ງ່າໄມ້ ແຄມຊາຍປ່າ ຫັນ ຫນ້າມາຫາພວກເຮົາຢູ່ສອງສົບ! ຕະຫລອດເວລາສອງມື້ ທີ່ລໍຄອຍ ໃຫ້ໄອຍະການມາຮອດຊາກສົບກໍຫລັບຢູ່ຫັ້ນ, ແນມເບິ່ງຊີວິດພາຍ ໃນນິຄົມດ້ວຍແກ່ນຕາໂປໂປດອອກຈາກເບົ້າ.

ແທນທີ່ຈະຢ້ານກົວຕໍ່ເຫດການເຫລົ່ານີ້, ພວກເດັກນ້ອຍນິ ຄົມຊ້ຳສົນໃຈຕິດຕາມເລື່ອງດ້ວຍຄວາມຈົງໃຈແບບເປີດເຜີຍ. ເມື່ອ ຫິມະເລີ່ມເປື່ອຍໃນລະດູບານໃຫມ່ ພວກເຂົາໄດ້ຊອກເກັບເອົາຫົວ ກະໂຫລກເຫລືອຈາກຫມາໃນແຫ້ນມາສຸບໃສ່ໄມ້ຄ້ອນຍາວໆ ແລ້ວ ນຳມາໄວ້ໃນນິຄົມ ດ້ວຍເຈດຕະນາຈະແຈ້ງອັນຫນຶ່ງຄືເອົາມາຫລອກ ລີ ເປຕຣອບນາ. ເຮັດແນວນີ້ບໍ່ພໍທໍ່ໃດເທື່ອດອກ, ພວກຄູສອນ ເຊົ່າແຕ່ລະມື້ກໍຜ່ານຜ່າເລື່ອງຫນ້າຢ້ານມາແລ້ວນັ້ນຈະນອນສັ່ນທິດໆ ຢູ່ໃນຕຽງຕະຫລອດຄືນຄອງວ່າບໍ່ຊ້ຳບໍ່ນານ ຈະມີຊຸມໂຈນຄາດຕະ ກອນໂປໂລເຂົ້າມາ ເຮັດເລືອດສາດກັນໃຫ້ເບິ່ງ. ຜູ້ຢ້ານກ່ວາຫມູ່ ແມ່ນສອງພີ່ເມຍ ໂອຊິບິບ ເຊົ່າຕາມຄວາມເຫັນຂອງຄົນສ່ວນ ຫລາຍແລ້ວເຫັນວ່າເປັນຫນ້າປຸ້ນກ່ວາຫມູ.

ແລ້ວຫນຶ່ງໃນທ້າຍເດືອນກຸມພາ ເມື່ອກອງນັບນຸກອາຫານ ຂອງພວກເຮົາທີ່ກັບມາແຕ່ໃນເມືອງ ດ້ວຍຄວາມໄວຂະຫນາດເຕົ່າ ແລ່ນຕາມປົກກະຕິຂອງມັນ ກໍຖືກປຸ້ນໃນໂຄ້ງສຸດທ້າຍກ່ອນຈະຮອດ ນິຄົມ. ໃນກອງນັ້ນມີພຽງເມັດພືດແລະນ້ຳຕານເຊົ່າດ້ວຍເຫດຜົນອັນ ໃດອັນຫນຶ່ງ, ມັນເປັນອາຫານປະເພດຢູ່ນອກຄວາມສົນໃຈຂອງ

ພວກນັກປຸ້ນ. ນອກຈາກກອກດູດຂອງລາວແລ້ວ ກາລິນາ ອີວາໂນ ວິດ ບໍ່ມີສິນບັດໃດໆຕິດໂຕເລີຍ. ສະພາບດັ່ງກ່າວເຮັດໃຫ້ພວກໂຈນ ກືອຳນາດບາດໃຫຍ່ສະແດງຄວາມໂມໂຫໂທໂສໃສ່ລາວ, ພວກມັນ ຕີຫົວລາວ ຈົນກົ້ງຕົກລົງໃສ່ຫີມະ ແລະລາວກໍນອນນິດອົ້ມສົ້ມຢູ່ຫັ້ນ ຈົນວ່າພວກເຂົາລັບຕີວໄປ. ທ້າວກູດຜູ້ເຊົ່ງເປັນພຽງຄົນດູແລ "ນັກ ນ້ອຍ" ເປັນປະຈຳນັ້ນກໍເປັນແຕ່ພຽງຜູ້ຊົມເຫດການຄັ້ງນີ້ເທົ່ານັ້ນ. ເມື່ອມາຮອດນິຄົມ ຄົນທັງສອງກໍຍາດກັນເລົ່າເລື່ອງຢ່າງຍືດຍາວ, ກາລິນາ ອີວາໂນວິດ ພັນລະນາໃຫ້ເປັນເລື່ອງໂສກນາດຕະກຳ, ສ່ວນກູດ ເລົ່າຕາມແບບຂອງມັນເອງຄືເປັນເລື່ອງຕະຫລົກ. ແຕ່ ຫມົດທຸກຄົນກໍຕົກລົງເປັນເອກະສັນວ່າ: ຕ້ອງສົ່ງເດັກນ້ອຍ ຫນຶ່ງກອງໄປຮັບກວນທຸກໆຄັ້ງ.

ພວກເຮົາປະຕິບັດແບບນີ້ຕະຫລອດສອງປີ ແລະເອີ້ນປະຕິບັດ ການດັ່ງກ່າວຕາມຄຳສັບທະຫານວ່າ: "ເຂົ້າຍຶດກະຫນິນ".

ຫນ່ວຍຄຸ້ມກັນປະກອບດ້ວຍສະມາຊິກປະມານສິບຄົນ ບາງຄັ້ງ ຂ້າພະເຈົ້າໄດ້ອອກໄປນຳຍ້ອນປືນລັ້ນກະບອກດຽວ ທີ່ຂ້າພະເຈົ້າບໍ່ ອາດມອບໃສ່ມືໃຫ້ນັກຮົບຜູ້ໃດນັ້ນເອງ ແລະຖ້າຫາກຂາດອາວຸດ ອັນນີ້ແລ້ວ ຫນ່ວຍຂອງພວກເຮົາກໍຊຸ້ຳ ຂາດພະລັງໄປ. ມີແຕ່ ຊາ ໂດຣອບ ຜູ້ດຽວເທົ່ານັ້ນທີ່ບາງຄັ້ງ ຂ້າພະເຈົ້າເອົາປືນໃຫ້ຈັບ ແລະ ຫນໍກໍຮັບເອົາໄປຂັດໃສ່ ເທິງຫົວສົ້ງຂາດໆຂອງມັນຢ່າງພາກພູມໃຈ.

ຫນ້າທີ່ໄປເຝົ້າຍາມກະຫນິນໃຫຍ່ເປັນວຽກງານຫນຶ່ງ ທີ່ຫນ້າ ສົນໃຈຫລາຍ. ພວກເຮົາຍາຍກັນຢູ່ຕາມແຄມທາງປະມານ ກິໂລ ແມັດເຄິ່ງ ນັບແຕ່ຂົວຂ້າມຫ້ວຍນ້ອຍຈົນເກືອໂຄ້ງໃກ້ໆນິຄົມ. ພວກ

ເດັກນ້ອຍໂດດເຕັ້ນແລ່ນຢອກກັນຢູ່ເທິງກອງຫີນ ເພື່ອບໍ່ໃຫ້ແຂງ ກະດ້າງຕາຍ ທັງເອົ້ນໃສ່ກັນເປັນໄລຍະ ເພື່ອບໍ່ໃຫ້ຂາດການຕິດຕໍ່. ຕາມຄວາມຄຶດຂອງຜູ້ເດີນທາງໃນຕອນຄ່ຳມືດນັ້ນ ພວກເຮົາເປັນຄື ຜູ້ມອບຄວາມຕາຍໃຫ້ແກ່ພວກເຂົາຢ່າງແນ່ນອນໂລດ. ພະກໄທ ບ້ານທີ່ກັບຈາກໃນເມືອງ ຕີ້ນາເລ່ງຝີຕີນແລ່ນລືອໄປຢ່າງບໍ່ປາກໍ່ເວົ້າ ຫຍັງຈັກຄວາມ ເພື່ອນຳກອງນແລ່ນຜ່ານກັນແກ່ວເງົ່ານັດຈຸລາດເຊົ່ງ ຢືນຢູ່ຫ່າງໆກັນເປັນລະຍະເຫລົ່ານີ້ໃຫ້ໄປໄວຢ່າງສຸດຂີດ. ພວກຫ້ວ ຫນ້າສະຫະກອນກະເສດກັບພວກອຳນາດການປົກຄອງ ນັ່ງຢູ່ໃນກະ ບະລົດມ້າ ເຊົ່ງແລ່ນລືอດ້ວຍຄວາມໄວສຸດຂີດນັ້ນ ກໍບໍ່ເວັ້ນທີ່ຈະ ເດ່ປາກປືນລູກແຜດກັບປືນການາບິນ ອອກມາໃສ່ພວກເດັກນ້ອຍ, ສ່ວນຜູ້ຍ່າງມານັ້ນຢຸດກ້າກັນເປັນກຸ່ມຢູ່ໃກ້ໆຂົວ.

ເມື່ອໃດ ຂ້າພະເຈົ້າອອກມານຳ ພວກເດັກນ້ອຍບໍ່ເຮັດແນວໂລ ເລຈັກເທື່ອ ແຕ່ກ້າເມື່ອໃດຂ້າພະເຈົ້າບໍ່ຢູ່ແລ້ວ ພວກເຂົາບໍ່ລະໂອ ກາດທີ່ຈະຢອກລໍ້ຄົນຜ່ານທາງ ຈົນໃນທີ່ສຸດບໍ່ດົນ ຊາໂດຣອບ ກໍ ປະຕິເສດ ບໍ່ຍອມຖືປືນສັ້ນຂອງຂ້າພະເຈົ້າ ແລະມັກຮຸງກຮ້ອງແກມ ອ້ອນວອນໃຫ້ຂ້າພະເຈົ້າອອກມາກວດກະຫນິນນຳ. ຈັ່ງຊັ້ນຂ້າພະ ເຈົ້າຈຶ່ງໄດ້ອອກມານຳກອງປ້ອງກັນທຸກໆຄັ້ງ ແລະຍັງເອົາປືນໃຫ້ຊາ ໂດຣອບຖືຢູ່ ເພື່ອບໍ່ໃຫ້ມັນສູນເສຍຄວາມພາກພູມໃຈອັນນ້ອຍຂອງມັນ ໄປ.

ພໍ "ບັກນ້ອຍ" ຂອງພວກເຮົາໂປໂລອອກມາ ພວກເຮົາພາ ກັນຮ້ອງຕ້ອນຮັບມັນວ່າ:

-ຢຸດ! ຢຸດ! ຍົກມືຂຶ້ນ!

ແຕ່ ກາລິນາ ອິວາໂນວິດ ນັ້ນ ພໍພຽງແຕ່ຍິ້ມເສີຍໆ ແລະພະ ຍາຍາມຕໍ່ໄຟໃສ່ກອກຢ່າງເອົາໃຈໃສ່ແບບພາໂລ. ລາວເຮັດຢູ່ຈັ່ງຊັ້ນ ຈົນມາຮອດນິຄົມ ສົມກັບສຸພາສິດລາວອຸກຮາອົນທີ່ເວົ້າວ່າ: "ເວລາ ຜ່ານໄປຢ່າງບໍ່ຮູ້ເມື່ອ".

ຫນ່ວຍຄຸ້ມກັນຂອງພວກເຮົາ ຍ່າງຈຸ້ມກັນຕິດຕາມ "ບັກນ້ອຍ" ມາໃກ້ໆ, ສິ່ງສຽງອຶກກະທຶກຄຶກໂຄມ ຈົນເຂົ້າມາເຖິງນິຄົມ ແລະສໍ້ ສິນ ກາລິນາ ອິວາໂນວິດ ເຖິງຂ່າວຄາວທຸກຢ່າງທີ່ກ່ຽວພັນກັບສະ ບຽງອາຫານ.

ໃນລະດູຫນາວປີດຽວກັນ ພວກເຮົາກໍກະໂດດເຂົ້າສູ່ກິດຈະການ ອັນອື່ນ ເຊິ່ງຢູ່ນອກຂອບເຂດວຽກງານຂອງນິຄົມແຕ່ຫາກເພື່ອສຶກ ຜົນປະໂຫຍດຂອງລັດ. ພະນັກງານປ່າໄມ້ຜູ້ຫນຶ່ງມາຫາພວກເຮົາຂໍ ໃຫ້ເບິ່ງແຍງໄມ້ຂ່ອຍ; ມີການລັກຕັດໄມ້ໃນປ່າຫລາຍ ແລະລາວກໍບໍ່ ມີຄົນຊ່ວຍພຽງພໍເພື່ອເຮັດວຽກນີ້.

ພະນັກງານປ່າໄມ້ຂອງລັດຍົກການພວກເຮົາຂຶ້ນຫລາຍແມ່ນແຕ່ ໃນສາຍຕາຂອງພວກເຮົາເອງ, ນຳເອົາວຽກທີ່ຫນ້າສົນໃຈເປັນພິ ເສດມາໃຫ້ແກ່ພວກເຮົາ ແລະສະເພາະແລ້ວແມ່ນນຳເອົາຜົນປະ ໂຫຍດຫລາຍອັນມາໃຫ້ແກ່ພວກເຮົາ.

ໃນຄືນຂ້ອນແຈ້ງມື້ຫນຶ່ງ ຄວາມມືດຍັງແຜ່ກະຈາຍໄປທົ່ວ, ສຽງ ທຸບປ່ອງຢ້ຽມໄດ້ປຸກໃຫ້ຂ້າພະເຈົ້າຕື່ນສະດຸ້ງໃນທັນທີ ເມື່ອມືນຕາ ຂຶ້ນກໍເຫັນເງົາຜົມຫຍຸ້ງຫຍອງ ແລະປາຍດ້ງຂອງຄົນຜູ້ຫນຶ່ງປີ້ກໃສ່ ກັບນ້ຳຫມອກກ້ານເທິງແຜ່ນແກ້ວປ່ອງຢ້ຽມຫ້ອງນອນ.

- ມີຫຍັງຫວະ?

- ອາບໂຕນ ເຊມືອໂນວິດ ມີຄົນລັກຕັດໄມ້ຢູ່ໃນປ່າ!

ຂ້າພະເຈົ້າຈຸດຕະກຽງ ແລະນຸ່ງເຄື່ອງຢ່າງວ່ອງໄວ, ຍົບເອົາປືນ ສັ້ນກັບປືນຍາວລຸກແຜດແລ້ວອອກມາ. ອາຊາສະຫມັກຜູ້ຍິ່ງໃຫຍ່ ເພື່ອທຸລະກິດກາງຄືນສອງຄົນຄື ບູຮຸນ ກັບບັກນ້ອຍ ເຊລາປູຕີນ ຜູ້ໄຮ້ດຽງສາ ຍືນຄອງຖ້າຂ້າພະເຈົ້າຢູ່ເກີຍຊານ, ບູຮຸນ ຮັບເອົາ ປືນໄປກ່ືແລ້ວພວກເຮົາຈ່ຶງອອກຢ່າງນຸ່ງຫນ້າເຂົ້າປ່າ.

- ພວກເຂົາຢູ່ທາງໃດ?

- ຟັງສຽງກ່ອນ...

ພວກເຮົາຢຸດຢ່າງ. ທຳອິດ ຂ້າພະເຈົ້າ ບໍ່ໄດ້ຍິນຫຍັງ ແຕ່ ຕໍ່ມາກໍເລີ່ມຈັບທິ່ມາຂອງສຽງໄດ້ ມັນຄ່ອຍເບົາຫລາຍ ແລະລ່ອງລອຍ ສັບປົນເຂົ້າກັບສຽງລາຕີກັບສຽງຫັນໃຈຂອງພວກເຮົາເອງ, ສຽງນັ້ນ ເປັນສຽງຫນັກໆ ທີ່ຫມາຍບອກບາດພັນໄມ້ຂອງຄົນຕັດຟືນ. ພວກ ເຮົາມຸ່ງຫນ້າໄປ, ກົ້ມໂຕກ່ອງລົງ, ງ່າຕົ້ນສົນນ້ອຍຂ່ວນໃບຫນ້າ ເກາະແຈ່ນຕາຂ້າພະເຈົ້າອອກ, ຕີນຕີ້ອຂອງພວກເຮົາເຕັມໄປດ້ວຍ ລະອອງຫີມະ. ບາງເທ່ືອສຽງພັນໄມ້ກໍມິດງຽບໄປຢ່າງກະທັນຫັນ, ພວກເຮົາເລີຍຈັບທິດທາງບໍ່ກ່ືກ ແລະຢຸດກ້າຢ່າງທໍລະຫົດອິດທົນ. ຈາກນັ້ນ ສຽງກໍດັງກັບຄືນມາອີກ ຮຸນແຮງກວ່າແລະຢູ່ໃກ້ໆນ້ີເອງ.

ພວກເຮົາຕ້ອງເຂົ້າໄປໃກ້ໆຂ້ີຂະໂມຍ ໂດຍບໍ່ໃຫ້ມັນຮູ້ສຶກຕົວ ເພ່ືອບໍ່ໃຫ້ມັນແລ່ນຫນີກ່ອນ. ບູຮຸນ ນັ້ນຍ່າງໄວຄ່ອງທັ່ງເຄ່ືອງກັບໆ ໄປປານຫນີ, ບັກນ້ອຍ ເຊລາປູຕີນ ເຕ້ັນເຍາະໆນ່ໍາຫລັງມັນໄປ, ຂິດຕົວຢູ່ໃນ "ເສ້ືອຍ່ານກ້ັນ", ຂ້າພະເຈົ້າເປັນຜູ້ຢູ່ຫລັງສຸດ.

ໃນທ່ີສຸດ ພວກເຮົາກໍມາຮອດເປ້ົາຫມາຍ. ພວກເຮົາຈອບລ້ີຢູ່

ເບື້ອງຫລັງຕົ້ນແປກຕົ້ນຫນຶ່ງ, ພໍດີໄດ້ເຫັນຕົ້ນແປກງາມລໍ່ລຶ້ນ ຫນຶ່ງສັ່ນຍຶກໆຂຶ້ນ ແລະຢູ່ຕີນຂອງຕົ້ນໄມ້ກໍມີເງົາ ຮ່າງຫນຶ່ງ. ຄົນຜູ້ ນັ້ນ ຟັນຕົ້ນໄມ້ຄ່ອຍໆສອງສາມບາດ ທັງບໍ່ມີທ່າທີຫມັ້ນໃຈໃນຕົວ, ເຂົາເງີກໂຕຂຶ້ນຢຶດຄໍ່ສ່ອງເບິ່ງອ້ອມຮອບໂຕ ຈາກນັ້ນ ຈຶ່ງລົງມືເຮັດ ວຽກຕໍ່, ຫ່າງຈາກນັ້ນມາປະມານ ຫ ແມັດ, ບຸຮຸນຍົກປືນຂຶ້ນ, ນິ້ວມືແຕະໃສ່ໄກປືນ, ປາຍປືນຊີ້ຂຶ້ນຟ້າ ແນມເບິ່ງຫນ້າ ຂ້າພະເຈົ້າ ທັງກັ້ນລົມຫັນໃຈ. ເຊລາປູຕີນ ຫມອບຢູ່ຂ້າງໆຂ້າພະເຈົ້າຊຸ່ມຂ້ານ ປ່າໄຫລ່ມາວ່າ:

- ໄດ້ແລ້ວເບາະ? ຈັດການໄດ້ຫວະ?

ຂ້າພະເຈົ້າງຶກຫົວຕອບ, ເຊລາປູຕີນ ຈຶ່ງດຶງແຂນເສື້ອຂອງບຸ ຮຸນ.

ສຽງປືນດັງຂຶ້ນຢ່າງສະນັ່ນຫວັ່ນໄຫວ, ແລະສົ່ງສຽງສະທ້ອນ ກ້ອງໄປທົ່ວພົງໄພ.

ຊາຍຜູ້ກືຂວານນັ່ງຫມູບລົງ ຫາມສັນຊາດຕະຍານປ້ອງກັນໄພ, ຈາກນັ້ນທຸກຢ່າງກໍມິດງຽບໄປ. ພວກເຮົາຫຍັບເຂົ້າໄປຫາມັນ. ເຊລາປູຕີນນັ້ນຮູ້ວຽກງານຂອງມັນດີຫລາຍ, ໃນຊ່ວພິບຕາດຽວຂວານ ກໍເຂົ້າມາຢູ່ໃນມືຂອງມັນແລ້ວ. ບຸຮຸນ ຮ້ອງທ້ວງຂຶ້ນຢ່າງຕະຫລົກວ່າ:

- ອ່າ... ອ່າ! ມຸດຊີ ກາໂປວິດ, ສະບາຍດີຕອນເຊົ້າ!

ມັນຕິບປ່າໄຫລ່ຂອງລາວ ແຕ່ ມຸດຊີ ກາໂປວິດ ບໍ່ຢູ່ໃນສະພາບ ທີ່ຈະອ້າປາກຕອບຫຍັງໄດ້, ລາວສັ່ນຫົວໆ ແລະສະຫລັດຫົມະອອກ ຈາກແຂນເສື້ອເບື້ອງຊ້າຍແບບບໍ່ຈິງໃຈ.

ຂ້າພະເຈົ້າຖາມຂຶ້ນວ່າ:

- ມ້າຢູ່ໄກບໍ?

ມູດຊີ ກາໂປວິດ ຍັງຄົງເປັນຄົນປາກກ້າຢູ່ ແຕ່ ບູຮຸນ ເປັນຜູ້ຕອບແທນວ່າ:

- ມ້າຢູ່ຫັ້ນເດ້! ເຮ້ຍແມ່ນໃຜຢູ່ຫັ້ນນະ? ມາຫນີ້ດຸ!

ຮອດບັດນີ້ ຂ້າພະເຈົ້າຈຶ່ງແນມເຫັນວ່າຢູ່ເບື້ອງຫລັງງ່າແປກທີ່ປະສານສອດກັນຢູ່ເປັນຝາຫ່າງໆພຸ້ນມີຫົວມ້າ ແລະລໍ້ຕ່າງເຄື່ອງຈອດລໍ້ບ້ຽງຢູ່.

ບູຮຸນ ຈັບແຂນ ມູດຊີ ກາໂປວິດ ຂຶ້ນຂ້າງຫນ້ຳແລ້ວເວົ້າຂຶ້ນປົນຕະຫລົກໆວ່າ:

- ມູດຊີ ກາໂປວິດ ເຊີນໄດ ລົດໂຮງຫມໍຢູ່ທາງນີ້!

ໃນທີ່ສຸດ ມູດຊີ ກາໂປວິດ ຈຶ່ງສະແດງກິລິຍາທີ່ຫມາຍບອກວ່າລາວຍັງບໍ່ຕາຍອອກມາ ລາວຖຶງຫມວກສຸບອອກຍົກມືຂວາຜົ່ມ ແລະຈົ່ມພຸມໆໂດຍບໍ່ແນມເບິ່ງຫນ້າພວກເຮົາວ່າ "ເທວະດາເອີ້ຍ! ເທວະດາເອ້ີ!"

ພວກເຮົາຍ່າງໄປຫາລໍ້ເລື່ອນ.

ລໍ້ເລື່ອນໂງ້ງກັບຄືນທາງເກົ່າຍ່າງຊ້າໆ ແລະພາພວກເຮົາແລ່ນມາຕາມຮອຍຮ່ອງຫນ້ຳ ທີ່ພໍຫລຽວເຫັນຢູ່ເທິງແຜ່ນຫີມະຫນາແລະອ່ອນນຸ່ມ. ຜູ້ຂັບຂີ່ລໍ້ເລື່ອນເປັນບ່າວນ້ອຍໄວ ໑໔ ປີ, ມັນໃສ່ຫມວກສຸບຫນ່ວຍມະຫີມາ ແລະເກີບໂບກ, ບ້ຽດັບມ້ຽດ້ວຍການຈຸປາກແຮງໆ ແລະສັ່ນບ້ຽຫຽນແບບເທ່ຫ້າໆ. ມັນເຮັດຫນ້າບຸດ ແລະມີທ່າທີບໍ່ພໍໃຈຈິນເຫັນໄດ້ຄັກ. ພວກເຮົາພາກັນມິດ.

ພໍແຕ່ອອກມາຮອດແຄມລາຍປ່າ, ບູຮູນ ກໍຍາດເອົາສາຍບັ້ງ ຫນນມາຈາກມືນັນມາກ່ືເອງ.

-ເຮ້ຍ! ບໍ່ແມ່ນທາງນັ້ນເວ້ຍ, -ຄັນມ່ືມືເຄ່ືອງບັນທຸກ ຈ່ຶງ ໄປທາງນ້ີ, ແຕ່ສໍາລັບພໍ່ມ່ືງ ຕ້ອງໄປທາງພຸ້ນເວ້ຍ...

-ໄປນ້ິຄົນຫວະ? -ບ່າວນ້ອຍຖາມຂ້ຶນ ແຕ່ ບູຮູນ ບໍ່ປ່ອຍ ເຊ່ືອກບັ້ງຫນໃຫ້ນັນ ທ້ັງດຸກເຊ່ືອກໃຫ້ມ້າລ້ອງໄປທາງນ້ິຄົນ.

ອາລຸນພວມຈະເບ້ິກຟ້າ.

ນູດຊ ກາໂປວ້ິດ ເດ່ືຂ້ານແຂນ ບູຮູນ ມາດ່ຶງເຊ່ືອກມ້າໃຫ້ ນັນຢຸດ ແລະໄຊ້ມ່ືເບ້ືອງຫນ່ຶງດ່ຶງຫນວກສຸບອອກ.

-ອານໂຕນ ເຊມ່ືອໂນວ້ິດ, ປ່ອຍຂ້ອຍໄປເທາະ! ນັບວ່າແມ່ນ ເທ່ືອທໍາອ້ິດ ທ່ີຂ້ອຍມາຕັດໄມ້... ພວກເຮົາບໍ່ມ່ືຟືນເລ້ຍ... ປ່ອຍ ຂ້ອຍໄປເທາະ!

ບູຮູນ ບໍ່ດ້ີໃຈ ນັນສັ່ນມ່ືເກ້ົາ ນູດຊ ເພ່ືອໃຫ້ຝ່າຍນ້ີປ່ອຍເຊ່ືອກ ບ້ັງຫນ ແຕ່ນັນບໍ່ດ້ີມ້າໃຫ້ອອກແລ່ນ ນັນຄ່ືວ່າ ຂ້າພະເຈ້ົາຈະ ເວ້ົາຫຍ້ັງ.

-ໂຍ້ວ ນູດຊ ກາໂປວ້ິດ, -ຂ້າພະເຈ້ົາເວ້ົາຂ້ຶນ, -ນັນບໍ່ມ່ີ ທາງເລ່ືອກແລ້ວ ຕ້ອງໄດ້ບັນທ່ຶກຄະດ່ີສ່ືງທາງການ ນັນເປັນເລ່ືອງ ກ່ຽວກັບລັດເດ້, ເຈ້ົາເອງກໍຮູ້ດ່ີຢູ່ເດ້.

-ນັນບໍ່ແມ່ນເທ່ືອທໍາອ້ິດດອກ, -ສ່ຽງແຈ່ມໃສຂອງ ເຊລາປູ ຕິນ ດ້ັງຫອງຂ້ຶນ ກ້ານກາງບັນຍາກາດແຫ່ງຮຸ່່ງອາລຸນ, -ບໍ່ແມ່ນ ເທ່ືອທໍາອ້ິດຈັກດ່ື, ເທ່ືອທໍາອ້ິດແທ້ໆ ແມ່ນຫນໍ ວາຊ່ືລ່ີ ຂອງເຈ້ົາ ພຸ້ນທ່ີຖ່ືກຈັບໄດ້ນະ...

ບູຮຸນ ສັ່ງສຽງຫ້າວຕໍ່ຂັດຈັ່ງຫາວະທຳນອງເພງແຈ່ມໃສບົດນີ້ ວ່າ:

- ໂຍ້ວ ບໍ່ແມ່ນຊິມາກຽງກັນຢູ່ຫນີ້ເດ້, ອ້າງເຄຣ ໂຕຫັ້ນບໍ່ມີ ສ່ວນກ່ຽວຂ້ອງຫຍັງ ຫາແລ່ນຄືນເມືອເຮືອນບອກແມ່ໂຕວ່າ ພໍ່ ໂຕເສຍທ່າແລ້ວ ສັ່ງເຂົ້າມາໃຫ້ລາວກືນແດ່ ວ່າຊັ້ນເດ້.

- ອ້າງເຄຣ ຕາຕໍ ຟ້າວໂຕນຈາກລໍ້ເລື່ອນ ແລ່ນລື່ວໄປຍັງຕູບ ກຽງນາ ສ່ວນພວກເຮົາເດີນທາງຕໍ. ຢູ່ທີ່ປະຕູເຂົ້ານິຄົມ ເດັກນ້ອຍ ກຸ່ມຫນຶ່ງມາຢືນຄອງກ້າຕ້ອນຮັບພວກເຮົາ.

- ໂຫ້! ພວກເຮົາໂລດຄຶດວ່າ ພວກເຈົ້າແຈບຢູ່ໃນປ່າຫັ້ນແລ້ວ ຕັ້ຊັ້ນດອກ, ພວມວ່າຊິອອກໄປຊ່ອຍຢູ່ພໍດີ.

- ການປະຕິບັດງານຂອງພວກເຮົາໃນຄັ້ງນີ້ປະສົບຄວາມສຳເລັດ ຢ່າງຫນ້າຫວາດສຽວເວີ້ຍ! - ບູຮຸນຕອບທັ້ງຫົວ.

ຄົນກຸ່ມຫນຶ່ງມາຊຸມກັນຢູ່ໃນຫ້ອງຂອງຂ້າພະເຈົ້າ. ມູດຊິ ກາໂປ ວິດ ນັ່ງລົງເທິງຕໍ່ຫນ້າຂ້າພະເຈົ້າຢ່າງຫມົດຫວັງ. ບູຮຸນ ຢືນຢູ່ຂ້າງ ເຕົາໄຟ ກືບືນຍາວບໍ່ວາງ, ເຊລາປູຕິນ ຊັບຊຶ່ມໃຫ້ຫມູ່ຟັງເຖິງ ເລື່ອງຫນ້າຫວາດສຽວແຫ່ງຄືນສ່ຽງໄພຄືນນີ້. ເດັກນ້ອຍສອງຄົນ ນັ່ງຢູ່ເທິງຕຽງຂອງຂ້າພະເຈົ້າ, ສ່ວນຜູ້ອື່ນໆນັ່ງຕາມແປ້ນມ້າ, ທຸກ ຄົນຕັ້ງໃຈຕິດຕາມການບັນທຶກຄະດີດ້ວຍຄວາມສົນໃຈ.

ມັນແມ່ນການບັນທຶກຄະດີປະເພດລະອຽດລະອໍພິລຶກ.

- ເຈົ້າມີດິນຢູ່ ၁၈ ເດເຊຍຕິນ* ກັບມ້າສາມໂຕແມ່ນບໍ?

---

* ເດເຊຍຕິນ ເທົ່າກັບ 0,0၈ ເຮັກຕາ

- ແມ່ນຫຍັງເກາະ? ມ້າວ່າຕິ? ມູດຊີ ກາໂປວິດ ຄາງອຸ່ມໆ,- ພວກເຮົາມີມ້ານ້ອຍໆຕາຍໆໂຕດຽວ... ອາຍຸໄດ້ສອງປີທໍ່ນັ້ນ.

- ສາມໂຕ, ສາມໂຕ, - ບູຮູນເນັ້ນຄວາມເວົ້າທ້າເອົາມືຕົບບ່າ ພໍ່ເກົ້າຊາວນາຢ່າງຫນ້າຮັກ.

ຂ້າພະເຈົ້າຂຽນຕໍ່:

...ເລື່ອຍເລິກ ຄກ ເລັ່ນ..."

ແຕ່ ມູດຊີ ກາໂປວິດ ວາແຂນອອກສະແດງວ່າບໍ່ເຫັນພ້ອມ:

- ໂອ່ ອານໂຕນ ເຊມືອໂນວິດ ເອີ້ຍ! ຂໍພະເຈົ້າອະໄພໃຫ້ເຈົ້າ ດ້ວຍທ້ອນ...

ໃນທັນໃດ ເຊລາປູຕິນ ກໍຢຸດຊັບຊຶ່ມກັບຫມູ່ ເພື່ອຕັ້ນມາເຮັດ ມືປະກອບລວງຍາວຂະຫນາດເຄິ່ງແມັດທ້າຫົວໃສ່ຫນ້າ ມູດຊີ ກາ ໂປວິດ.

- ທໍ່ນ້ຳຫວະ? ທໍ່ນ້ຳຫວະ? ແມ່ນບໍ່ລະ?

ມູດຊີ ກາໂປວິດ ຫັນຫນ້າຫນີເພື່ອບໍ່ຢາກເຫັນຮອຍຍິ້ມອັນນ້ຳ ແລະຫັນມາຕິດຕາມຮອຍປາກກາຂອງຂ້າພະເຈົ້າຢ່າງຍອມຈຳນົນ.

ການບັນທຶກຮຽບຮ້ອຍແລ້ວ, ມູດຊີ ກາໂປວິດລຸກຂຶ້ນ, ກ່ອນ ຈາກໄປ ລາວຈັບມືກັບຂ້າພະເຈົ້າດ້ວຍທ່າທີໂກດແຄ້ນຢ່າງຈະແຈ້ງ ແລະເດີນໄປຈັບກັບ ບູຮູນ ໃນນາມວ່າມັນເປັນຜູ້ອາວຸໂສກ່ວາຫມູ່ ໃນບັນດາເດັກນ້ອຍທີ່ຢູ່ໃນຫັ້ນ:

- ພວກເຈົ້າເຮັດແນວນ້ຳ ບໍ່ດີດອກ ທ້າວເອີ້ຍ, ແຕ່ລະຄົນມີ ສິດເຮັດທຸກຢ່າງເພື່ອຫາລ້ຽງປາກລ້ຽງທ້ອງ.

ບູຮູນ ກົ້ມຫົວຕອບຢ່າງສຸພາບວ່າ:

-ບໍ່ເປັນຫຍັງດອກ ພວກເຮົາກຽມພ້ອມທີ່ຈະຮັບໃຊ້ທ່ານຢູ່ສະ ເຫມີ.

ແຕ່ໃນທັນທີທັນໃດນັ້ນ ມັນກໍຄຶດພ້ຽງໃຫມ່ ຈຶ່ງເວົ້າວ່າ:

-ອາມໂຕນ ເຊມີອໂນວ ແລ້ວໄມ້ນັ້ນເດ ຈະເຮັດແນວໃດ? ພວກເຮົາຄຶດຊ່ອຍກັນ. ເປັນຄວາມຈິງຢູ່ວ່າຕົ້ນໄມ້ນັ້ນຖືກພັນ ເລິກເກືອບຊີໂຫ້ຍແລ້ວ ເຖິງຢ່າງໃດ ຮອດມື້ອື່ນກໍຈະມີຄົນເອົາມັນ ລົງ ແລະລັກເລື່ອຍຕັດຮອນໄປຫມົດ ໂດຍບໍ່ລໍ້ຖ້າໃຫ້ໃຜຄຶດແລ້ວ ບູຮູນ ລີວອອກໄປທາງປະຕູ, ຕອນກາຍຫນ້າ ມູດຊີ ກາໂປວ໊ດ ມັນຍັງທັນຫັນມາບອກຜູ້ພ່າຍແພ້ເປັນຄວາມສຸດທ້າຍວ່າ:

-ອັນນ້ຳຫັ້ນ ເຂົາຊິເອົາຄືນເມື່ອສິ່ງເຈົ້າດອກ, ບໍ່ຕ້ອງເປັນ ຫ່ວງ ເຮ້ຍສຸ ມີໃຜຊິໄປນຳເຮົາແດ່? ຈັກ ๕-๗ ຄົນກະພໍລະ, ມູດຊີ ກາໂປວ໊ດ ເຈົ້າມີເຊືອກຈັກເສັ້ນບໍ່ຢູ່ລໍ້ເລື່ອນເຈົ້າບ່າ?

-ມີມັດຕິດຢູ່ກັບລໍ້ຫັ້ນລະ.

ທຸກຄົນແຍກຍ້າຍກັນໄປ ຫລັງຈາກນີ້ຊົ່ວໂມງຫນຶ່ງ ພວກເຂົາ ກໍແກ່ລຳຕົ້ນແປກຂະຫນາດໃຫຍ່ມາລຳຫນຶ່ງ ມັນແມ່ນລາງວັນຂອງ ພວກເຮົາ. ຕາມທຳນຽມເກົ່າແກ່ຢ່າງຫນຶ່ງ ຂວານນັ້ນກໍຕ້ອງຕົກ ເປັນຂອງພວກເຮົາ. ຈົນວັນເວລາລ່ວງໄປດົນນານ ແຕ່ພວກເຮົາ ກໍຍັງໄດ້ຍິນພວກເດັກນ້ອຍຖືກຖຽງກັນວ່າ:

-ນີ້ຂວານສາມດວງ ເຮົາເອົາໃຫ້ໂຕທັງສາມແລ້ວ, ສອງດວງ ຢູ່ນີ້ແລ້ວ ແຕ່ອີກດວງຫນຶ່ງເດ້ລະ?

-ດວງໃດອີກ?

-ກະດວງຂອງ ມູດຊີ ກາໂປວິດ ຫັ້ນເດ, ພວກເຮົາຍຶດໄວ້ ຫວ່າງກ່ອນຫັ້ນບ່າ.

ມັນບໍ່ແມ່ນເລື່ອງສັ່ງສອນສິນທຳໃຫ້ກັນ ຫລືໃຊ້ອາລົມໂມໂຫ ໂຫໂສໃສ່ກັນດອກ, ແຕ່ມັນແມ່ນການຕໍ່ສູ້ທີ່ຫນ້າສົນໃຈ ແລະກາຍ ເປັນສິ່ງສຳຄັນຕົ້ນຕໍສຳລັບການດຳລົງຄົງຕົວຂອງພວກເຮົາ ແຕ່ການ ກຳເນີດມູນເຊື້ອແນວຄິດສ່ວນໂຮມພຸ້ນຕ່າງຫາກທີ່ເປັນຫນ້າສົນໃຈ. ຫລາຍຄັ້ງຫລາຍຫົນ ໃນຍາມຄ້ອຍຄ່ຳລົງແລງ ພວກເຮົາໂອ້ລົມກິກ ກຸງກັນ, ຫົວນຳກັນ ບາງເວລາຈິດໃຈຂອງພວກເຮົາກໍເພີດເພີນ ໄປນຳເລື່ອງຜະຈົນໄພຕ່າງໆ, ຂັ້ນຕອນອັນດຸເດືອດຫລາຍບັ້ນ ຊຸກຍູ້ ໃຫ້ພວກເຮົາໃກ້ຊິດສະຫນິດສະຫນົມເປັນອັນຫນຶ່ງ ອັນດຽວກັນ, ພວກເຮົາເຊື່ອມຕິດເຂົ້າກັນເປັນເອກະພົບຫນຶ່ງແລະສິ່ງນັ້ນ ກໍແມ່ນ ອັນທີ່ພວກເຮົາເອີ້ນວ່າ ນິຄົມກັອກກີ ນັ້ນເອງ.

ບົດທີ ຜ

ການຍາດແຍ່ງແອ່ງເຫລັກ

ຕະຫລອດເວລາເຫລົ່ານີ້ ນິຄົມຂອງພວກເຮົາຄ່ອຍມີວັດຖຸອຸປະ ກອນ ທີ່ຈຳເປັນແກ່ການດຳລົງຕົວຂອງມັນຫລາຍຂຶ້ນ. ຄວາມທຸກໄຮ້ ອະນາຖາສຸດຂີດ, ການມີເຫົ້າເຈາະຫົວ ແລະຕີນເຢັນກະດ້າງ... ທັ້ງຫມົດເຫລົ່ານີ້ ບໍ່ສາມາດເກືອດຫ້າມ ການຝັນເຖິງອະນາຄົດອັນ ສົດໃສຂອງພວກເຮົາໄດ້ດອກເຖິງແມ່ນວ່າ "ມ້າບັກນ້ອຍ" ທີ່ເຖົ້າອາ ຍຸໄດ້ ຜ0 ປີ ແລະ ເຄື່ອງຫວ່ານແນວປູກເກົ່າໆຂອງພວກເຮົາຈະ ໃຫ້ຄວາມຫວັງຕໍ່ການຂະຫຍາຍວຽກງານກະສິກຳ ແຕ່ດ້ານຫນ້ອຍ

ດວງອໍຕາມ ແຕ່ຄວາມໄຝ່ຝັນຂອງພວກເຮົາ ຊໍ້ກືກໍເນີດປ່ຽຈ່ຈາກ ວງກາງນອັນນີ້ແລ້ວ. ກໍາລັງຂອງມ້າ "ບັກນ້ອຍ" ນັ້ນໃຫ້ວ່າບໍ່ມີ ພຽງພໍທີ່ຈະແກ່ໄກເລີຍ, ມີແຕ່ຜູ້ຄຶດຝັນລິນໆແລ້ງໆເທົ່ານັ້ນແລ້ວ ຈຶ່ງຈະວາດພາບເຫັນ "ບັກນ້ອຍ" ແກ່ໄກຢູ່ໃນທີ່ງນາໄດ້. ນອກຈາກ ນີ້, ຖ້າຫາກວ່າພວກເຮົາເອງກໍອຶດຫິວໂພຕາຍຢູ່ແລ້ວ, ແນ່ນອນວ່າ "ບັກນ້ອຍ" ກໍຕ້ອງອຶດເທົ່າໆກັນ. ອາຫານທີ່ພວກເຮົາຫາໃຫ້ມັນ ໄດ້ກໍມີແຕ່ຫຍ້າແຫ້ງ ແລະບາງຄັ້ງກໍແມ່ນເຟືອງ, ເທົ່ານີ້ກໍຍ້ຽງຍາກ ພໍແຮງແລ້ວ. ຕະຫລອດລະດູຫນາວນັ້ນ ການເອົາມັນຫນ່ມກວ່ນ ບໍ່ແມ່ນການໃຊ້ວ່ງກທໍາມະດາ ແຕ່ຫາກແມ່ນເລື່ອງທໍລະມານສັດ ເອົາຊື່ໆ. ການີ ອີວາໂນວິດ ເຈັບແຂນເບື້ອງຂວາຢູ່ເປັນປະຈໍາ ຍ້ອນວ່າລາວຕ້ອງໄດ້ແກວ່ງໄມ້ແສ້ນານຂູ່ມັນເລື້ອຍໆ ຖ້າບໍ່ເຊັ່ນນັ້ນ ບັກນ້ອຍຈະຢຸດຢ່າງໂລດ.

ເຫດຜົນອັນສຸດທ້າຍກໍຄືວ່າ ເນື້ອດິນພາຍໃນເຂດນິຄົມຂອງ ພວກເຮົາ ບໍ່ເຫມາະສົມແກ່ການກະສິກໍາເລີຍ, ມັນເປັນດິນຊາຍຜົງ ເຊິ່ງພໍແຕ່ລົມພັດຄ່ອຍໆ ກໍໄຫ້ຟຸ້ມຂຶ້ນເປັນກອງໂລດ.

ມາຮອດປັດຈຸບັນ ຂ້າພະເຈົ້າເອງກໍຍັງບໍ່ເຂົ້າໃຈຄັກວ່າ ເຮັດ ແນວໃດຢູ່ໃນເງື່ອນໄຂແບບນີ້, ພວກເຮົາຈຶ່ງພາກັນໂດດເຂົ້າຫາການ ສ່ຽງໄພຫລ້ອນໆອັນນີ້, ຢ່າງໃດກໍຕາມກໍແມ່ນມັນນີ້ເອງທີ່ຊຸກຍູ້ໃຫ້ ພວກເຮົາຢືນຈ້ັງຢູ່ໄດ້.

ເລື່ອງທັ້ງຫມົດນີ້ ເລີ່ມຈາກເຫດການຫນ້າຢາກຫົວເລື່ອງ ຫນຶ່ງ.

ຢ່າງບໍ່ຄາດຝັນ, ໂຊກດີແລ່ນມາຕໍາພວກເຮົາເອງ: ພວກເຮົາ

ໄດ້ຮັບໃບບິງເພື່ອຕັດໄມ້ໃຫຍ່. ຈຳເປັນຕ້ອງໄດ້ໄປເອົາເອງຢູ່ໃນປ່າ ແລະປ່ານີ້ກໍຢູ່ໃນເຂດອຳນາດການປົກຄອງໂຊວຕຂັ້ນບ້ານພວກເຮົາ ເອງ ແຕ່ພວກເຮົາຫາກບໍ່ມີໂອກາດໄດ້ໄປທາງນີ້ຈັກເທື່ອ.

ຫລັງຈາກຕົກລົງກັບຊາວນາສອງຄົນທີ່ຢູ່ໃກ້ຄຽງນັ້ນ ແລ້ວພວກເຮົາກໍພາກັນເດີນທາງໄປຍັງເຂດເລີກລັບບ່ອນນີ້ ໂດຍຢືມມ້າຈາກພວກເຂົາເຈົ້າ. ຂະນະທີ່ ພວກຂັບກອນເລາະລົບເບິ່ງໄມ້ຕັດແລ້ວ ແລະຂົນເອົາທ່ອນໄມ້ໃຫຍ່ຂຶ້ນໃສ່ລໍ້ເລື່ອນທັງກົກກຽງກັນວ່າ ທ່ອນໃດຈະຕົກເຮ່ຍກາງທາງນັ້ນຂ້າພະເຈົ້າກັບ ກາລິນາ ອິວານອິດ ຊ້ຳພາກັນສົນໃຈຕໍ່ແກວຕົ້ນ ໄຮໃຫຍ່ ທີ່ຂຶ້ນຢູ່ເຫນືອປ່າພຶແຄມນ້ຳ ຫ້ວຍກ້ານຟາກພຸ້ນ.

ເມື່ອຂ້າມນ້ຳຫ້ວຍກ້ານໄປແລ້ວ ພວກເຮົາຈຶ່ງປີນຂຶ້ນໄປນ ນ້ອຍໆຕາມທາງຍ່າງແຄບໆເສັ້ນຫນຶ່ງໄປ, ຢູ່ຕໍ່ຫນ້າພວກເຮົາແມ່ນ ອານາຈັກແຫ່ງຄວາມຕາຍບ່ອນຫນຶ່ງ ມັນປະກອບດ້ວຍເຮືອນຕຶກ ປະມານສິບຫລັງທັງນ້ອຍແລະໃຫຍ່, ເຊິ່ງມີທັງໂຮງກອງນ, ຕູບ ນຸ່ງຫຍ້າ, ເຮືອນສຳຮອງ ແລະອາຄານອື່ນໆທີ່ເພພັງຄືກັນຫມົດທຸກ ຫລັງ. ທຸກຢ່າງຢູ່ໃນສະພາບທີ່ຖືກທຳລາຍມ້າງເພແບບຄຽງກັນຄືກາຍເປັນກ້ອນດິນຈີ່, ເສດດິນຫນຽວ ໂອບຫຸ້ມດ້ວຍຫີນະເປັນກອງນ້ອຍຢາຍຊະຊາຍ, ບ່ອນເຄີຍເປັນເຕົາໄຟ: ພື້ນແປ້ນ, ປະຕູ, ປ່ອງຢ້ຽມ, ຂັ້ນໄດ ຫາຍສ້ຽງໄປຫມົດ. ຝາກັ້ນແລະເພດານແຕກຫັກ ແລະມີການງັດໄຫ້ມ້າງຮອດຝາກໍ່ດິນຈີ່ ແລະພັ້ນກໍ່ຢູ່ຫລາຍບ່ອນແລ້ວ. ຈາກຄອກມ້າຂະຫນາດມະຫຶມານັ້ນ ຍັງຄົງເຫລືອແຕ່ຝາຕັ້ງສອງດ້ານ ແລະຢູ່ເຫນືອຝານີ້ຂຶ້ນໄປມີແອ່ງເຫລັກຊະນິດດີແອ່ງຫນຶ່ງ

ທ້ອຍຕ່ອງແຕ່ຄ້າງຢູ່ກາງອາກາດ, ເບິ່ງຄ່ອ່ສີທາຂອງມັນຍັງໃຫມ່ ອ່ຽມຢູ່. ມີແຕ່ແອ່ງຫນ່ອຍນີ້ແລ້ວທີ່ເຮັດໃຫ້ຮູ້ສຶກຄ່ອ່ມີຊີວິດຊີວາ ແດ່ ນອກນັ້ນແມ່ນສະພາບໃນປ່າຊ້າອ້ອຍຕ້ອຍ.

ແຕ່ແມ່ນປ່າຊ້າທີ່ຫລູຫລາສົມຄວນ ເບ້ືອງຫນ້ໍາແມ່ນເຮ້ືອນຕ້ືກ ຫລາຍຊັ້ນ ຍັງໃຫມ່ ແລະບ່ໍມີຫລ້ັງຄາ ເບ່ິງກ່ໍຮູ້ວ່າໄດ້ຮັບການປຸກ ສ້າງຢ່າງມີແບບມີແຜນ. ຫ້ອງນອນຂອງມັນທ້ັງກ້ວ້າງແລະສູງນ້ັນ ຍັງຄົງຮັກສາເພດານປະກອບລວດລາຍໄວ້ຢູ່ ແລະຂອບປ່ອງຢ້ຽມ ເປ້ັນຫີນອ່ອນນ້ັນ ກ່ໍຍ້ັງເຫລ້ືອຢູ່. ທ້ັງສ້ັ້ນເດ້ີນອ້ືກເບ້ືອງຫນ້ໍາ ແມ່ນຄອກມ້ານ້ໍ່ເປ ຕ້ິງທ້ີ່ຍ້ັງໃຫມ່ອ່ຽມຢູ່ຄ້ືກັນ, ເມ້ື່ອເຂ້ົ້າໄປເບ່ິງໃກ້ໆ ຈ່ຶ່ງເຫ້ັນວ່າອາຄານເຫລ່ົ່ານ້ີ້ແຫ້ນ້ນຫນາດ້ີຫລາຍ, ໄມ້ຂ່ື້ໄມ້ຂ້ວາຂອງ ມ້ັນເຮ້ັດດ້ວຍໄມ້ເນ້ືອດ້ີ, ບ່ອນຕ່ໍ່ບ່ອນຈອດລະອ່ຽດຊ່ຶງແຫ້ນ້ນແກ່ນ, ໄມ້ດ້ຽງງາມໄດ້ສ້ັດສ່ວນ ແລະຄວາມຕ້ັ້ງທ່ຽງຂອງຕ້ືກກ່ໍເປ້ັນຫນ້ໍາ ອ້ັດສະຈ້ັນ. ເວ້ົ້າໄດ້ວ່າ ເຄຫາສະຖານແຫລ່ງພະລ້ັງເສດຖະກ້ິດ ບ່ອນນ້ີ ບ່ໍ່ໄດ້ຕາຍນອດ້ນ້ອຍລ້ົງຍ້ອນໄວຊ້ະລາ ຫລ້ືພະຍາດອ້ັນໃດແຕ່ ຫາກຖ້ືກທ່ໍາລາຍໃນຂະນະທ້ີ່ມ້ັນກ່ໍາລ້ັງເບ່ັ່ງບານເຕ້ີບໃຫຍ່ນ້ັ້ນເອ່ງ.

ກາລ້ິນາ ອ້ິວາໂນວ້ິດ ນ້ັ້ນໃຫ້ວ່າ ອຸໂທອຸທ້ັງຢູ່ບ່ໍ່ເຊ້ົ່າ ຂະນະທ້ີ່ ແນມເບ່ິງສ້ິມ້ັດເຫລ່ົ່ານ້ີ້:

- ເບ່ິງເອ້ົ່າເທາະ! ມ້ີທ້ັງນ້ໍ່າຫ້ວຍ, ສວນ ແລ້ວກ່ະເບ່ິງຫ້ັ້ນ ທ່ີ່ງບ້ັ້ກງາມໆ!

ລ່ຳນ້ໍ່າຫ້ວຍໄຫລລ້ັ້ອໂຄ້ງອ້ອມບ່ໍລ່ິເວນເຄຫາສະຖານຮອດສາມ ດ້ານ ໂດຍໄຫລອ້ອມພູນ້ອຍຫນ່ອຍຫນ້ໍ່ງເຊ່ົ່ງແມ່ນພ້ືນທ້ີ່ອ່າວສຸງ ແບບຫາເບ່ິ່ງໄດ້ຍາກຢູ່ໃນເຂດທ່ີ່ງພ່ຽງຂອງພວກເຮ່ົ່າ. ສວນຕ້ົ້ນໄມ້

ເປັນເນີນຄ້ອຍຕ່ຳລົງໄປຮອດແຄມຫ້ວຍແບ່ງເປັນສາມຂັ້ນ: ຂັ້ນ
ສູງກວ່າຫມູ່ແມ່ນສອນຕົ້ນຫມາກເຊີຣີ, ຕ່ຳໄປແມ່ນຕົ້ນຫມາກໂປມ
ກັບຕົ້ນຫມາກປ໋ອ ແລະຂັ້ນສຸດທ້າຍແມ່ນປ່າຫມາກແຫລ້*.

ຢູ່ໃນເດີ່ນອີກເບື້ອງຫນຶ່ງມີໂຮງສີໃຫຍ່ຂະຫນາດ ໕ ຊັ້ນຕັ້ງຢູ່.
ພວກເຮົາຮູ້ນຳພວກເຮັດວຽກຢູ່ໂຮງສີວ່າ ເຄຫາສະກຳນແຫ່ງນີ້ແມ່ນ
ສົມບັດຂອງພວກອ້າຍນ້ອງຕະກຸນ ແຕຣບແກ ທີ່ໂດດໄປນຳກອງທະ
ຫານ ເດນີກິນ, ປະປ່ອຍເຮືອນຊານທີ່ເຕັມໄປດ້ວຍມະຫາສົມ
ບັດເຊັ່ນນີ້ໄວ້; ແລະສົມບັດເຫລົ່ານີ້ໄດ້ອົບພະຍົບໂຍກຍ້າຍໄປຢູ່ກົງ
ຊາຣອບກາ ເຊິ່ງເປັນບ້ານກັດໄປພຸ້ນແຕ່ດິນແລ້ວ, ບັດນີ້ ຮອດຜນ
ທີ່ກະໂຕຕົກເຮືອນເອງຕ້ອງໂຍກຍ້າຍໄປແລ້ວ.

ກາລິນາ ອິວາໂນວິດ ຍັງຄົງເມົ້ານ້ຳລາຍຕ່ຳໄປອີກວ່າ:

-ພວກຄົນປ່າ ແທ້ໆເລີຍລະ... ນ໊ອ່ານໍ, ພວກຂີ້ໂຮ້, ພວກ
ຈ້າ! ເບິ່ງເອົາແມ້. ເຄື່ອງດີໆຈັ່ງຊີ້... ມັນແມ່ນສຳລັບພວກສູໄດ໋!
ທ້ອງຫ້ອງນອນ, ທ້ອງຄອກມ້າ! ໂທ້... ສູມາຢູ່ແມ້, ບັກເວນນ໊ອ
ເອີ້ຍ! ຍ້າຍມາຢູ່ນີ້ແມ້, ມາມ໋ນນັດເອົາແມ້ ມາຫຸ້ງເຂົ້າຫຸ້ງນ້ຳກິນ
ຢູ່ຫນີ້ລະບໍ... ບັກຫ່າເອີ້ຍ... ແຕ່ພວກນ໊ອຈ້ຳພັດເອົາຂວານມາຟັນ
ມ້ານເຮືອນ ແນວນີ້ກະຮ່າວ່າເປັນ, ແລ້ວແມ່ນເພື່ອຫຍັງລະ?
ເພື່ອເອົາໄປດ້ງໄຟຕົ້ມເຂົ້າປ໋ອກ ເພາະວ່າສູຂີ້ຄ້ານໄປຕັດຟືນຢູ່ປ່າ,
ໃຫ້ທ້ອງໄຄ່ຕາຍຍ້ອນເຂົ້າປ໋ອກຫັ້ນແດ່ແມ້... ບັກຈ້າເອີ້ຍ! ຊ໋ວປານ

---

* ພືດພຸ່ມໃຫ້ຫມາກນ້ອຍໆເນື້ອອ່ອນເລ້, ເປັນສີແຫລ້ໃຊ້
ຫມັກເຮັດເຫລົ້າຫອມຫລືກວນໄວ້ກິນດິນ.

ນີ້ກະໃຫ້ມັນຕາຍຊ້ຳສາ... ຄົນແບບນີ້ຫວະ ບໍ່ມີການປະຕິວັດໃດ ດອກທີ່ຈະຊ່ອຍມັນໄດ້... ຮ້ຳ... ພວກບ້າ, ພວກໂງ່! ສູຊິວ່າແນວ ໃດບັດນີ້ຮ?...

ເວົ້າຮອດຫນີ້ ກາລິນາ ອິວາໂນວິດ ກໍຫັນມາຫາກຳມະກອນ ໂຮງສີຜູ້ຫນຶ່ງ ແລ້ວເວົ້າວ່າ:

-ນີ້ນ່າສະຫາຍ! ຄັນຢາກໄດ້ແອ່ງນີ້ຄວນຊິເວົ້າກັບໃຜເນາະ? ຫັ້ນນ່າແອ່ງທີ່ຍ້າຍມາແຂວນຢູ່ຄອກມ້ານັ້ນເດ້. ເກີງຈັ່ງໃດມັນກະຊິ ເປ່ເພ້ກໍ່ມໄປລ້ວ ໂດຍບໍ່ມີໃຜໄດ້ຮັບປະໂຫຍດນຳ.

-ແອ່ງນັ້ນຫວະ? ຂ້ອຍກໍບໍ່ຮູຫຍັງຄືກັນນັ້ນນລະ, ບາງທີອາດ ຊິແມ່ນສະພາໂຊວຽດທ້ອງຖິ່ນບຸເດ້ທີ່ເປັນຜູ້ຮັບຜິດຊອບ...

-ອ່າ... ຈັ່ງຊັ້ນກໍດີແລ້ວ, -ກາລິນາ ອິວາໂນວິດ ອຸທານ ແລະແລ້ວພວກເຮົາກໍຍ່າງກັບມາ.

ເມື່ອຍ່າງນຳຫລັງລໍ້ເລື່ອນຂອງຄົນເຮືອນໃກ້ມາຕາມກະຫນົນທີ່ ເລ່ມຮາບພຽງ ຍ້ອນວັນເວລາຫຍັບໃກ້ລະດູບານໃຫມ່ເຂົ້າມາຫລາຍ ແລ້ວນັ້ນ ກາລິນາ ອິວາໂນວິດ ກໍເລ່ມຝັນຫວານດ່ັງນີ້:

-ຖ້າວ່າໄດ້ແອ່ງນີ້ເມື່ອໄວ້ນີຄົມ ຄືຈະຄັກຫລາຍ, ລາວຈະເອົາ ມັນໄປໄວ້ຫ້ອງຊັກເຄ່ືອງ ຈາກນັ້ນຫ້ອງຊັກເຄ່ືອງກໍຈະກາຍເປັນຫ້ອງ ອາບນ້ຳ.

ນີ້ເຊ້ົາວັນຕ່ໍມາ, ກ່ອນຈະອອກໄປຕັດໄມ້ອີກ, ກາລິນາ ອິວາ ໂນວິດ ກໍດ່ືງຂ້າພະເຈ້ົາໄວ້ລົມນຳ:

-ເຮັດຫນັງສື ໃຫ້ຂອຍຖ່ືໄປຫາພວກສະພາໂຊວຽດທ້ອງຖ່ິນ ແດ່! ພວກເຂົາບໍ່ຕ້ອງການແອ່ງນ້ີທ່ໍາກັບຄົນຫ້ວໂລ້ນບໍ່ຕ້ອງການຫວີ ນັ້ນລະ... ສ່ວນພວກເຮົາ, ມັນຊ້ຳຫມາຍວ່າ ຈະມີແອ່ງອາບນ້ຳ...

ເພື່ອໃຫ້ລາວພໍໃຈ ຂ້າພະເຈົ້າຈຶ່ງຂຽນຫນັງສືໃຫ້ລາວ. ຕອນ
ແລ້ງ ກາລິນາ ອີວາໂນວິດ ກັບມາດ້ວຍຄວາມໂມໂຫ:

-ພວກຜາກ! ມັນຮູ້ແຕ່ທຶດສະດີ ແຕ່ບໍ່ຮູ້ຕີ້ອຈິງ ພວກເຂົາເວົ້າ
ວ່າ... ມັນເປັນຂອງລັດ, ອ່າ ພວກຂີ້ລຶດ, ເຈົ້າເຄີຍເຫັນຄົນໂງ່
ແນວນີ້ບໍ? ຂຽນອີກ, ຂ້ອຍຊິໄປຫາຄະນະກຳມະການບໍລິຫານຕາ
ແສງ.

-ໄປໃສ? ເຈົ້ງຊິໄປແນວໃດ ມັນຕັ້ງ 60 ກວ່າກິໂລແມັດ?
ເຈົ້າຊິຂີ່ຫຍັງໄປ?

-ມີເກ້ົາຫນຶ່ງມັນຊິໄປ, ຂ້ອຍຊິໄປນຳມັນ.

ໂຄງການສ້າງຫ້ອງອາບນ້ຳ ເຊິ່ງ ກາລິນາ ອີວາໂນວິດເປັນຜູ້
ເວົ້າເກ່ົງນັ້ນ ເປັນທີ່ພໍອົກພໍໃຈຂອງພວກເດັກນ້ອຍຫລາຍ ແຕ່ບໍ່ມີ
ໃຜເຊື່ອວ່າພວກເຮົາຈະໄດ້ແອ່ງເຫລັກມາເລີຍ.

-ບໍ່ຕ້ອງມີແອ່ງນັ້ນກໍໄດ້ນ່າ, ພວກເຮົາເຮັດແອ່ງໄມ້ເອົາກໍໄດ້ຄື
ກັນ.

-ໂອ້ຍນ້ຶງຫັ້ນຈັ່ງແມ່ນບໍ່ເຂົ້າໃຈຫຍັງຫມົດເນາະ! ຄັນເຂົາເຮັດ
ແອ່ງເຫລັກກໍຫມາຍຄວາມວ່າແອ່ງເຫລັກນັ້ນມັນມີປະໂຫຍດອັນໃດ
ອັນຫນຶ່ງ. ກູຄຶດວ່າຕ້ອງຍາດເອົາແອ່ງນັ້ນມາໃຫ້ໄດ້ ບໍ່ວ່າຊິເປັນ
ແນວໃດກໍຢ່າ...

-ແລ້ວພວກເຮົາຊິເອົາມັນມາດ້ວຍວິທີໃດລະ? ຊິໃຫ້ "ບັກ
ນ້ອຍ" ຫັ້ນຫາວະແກ່ມາ?

-ຕ້ອງເອົາມາໃຫ້ໄດ້! ໃຈບໍ່ກ້າບໍ່ໄດ້ຂີ້ຊ້າງງາເວີ້!

ເມື່ອກັບມາແຕ່ໄປຫາຄະນະກຳມະການບໍລິຫານງານຂັ້ນຕາແສງ

ປາກົດວ່າ ກາລິນາ ອີວາໂນວິດ ລືມຄຳເວົ້າອື່ນໄປຫມົດ ນອກຈາກ ຄຳປ້ອຍດ່າຢ່າງດຽວ.

ຕະຫລອດອາທິດຫນຶ່ງເຕັມໆ, ລາວຕິດຕ້ອຍຕ້ອຍຕາມ ຂ້າພະ ເຈົ້າທຸກບາດຍ່າງ ເພື່ອຮ້ອງຂໍຂ້າພະເຈົ້າທ່ານກາງສຽງຫ້ວຂ້ວນຂອງ ພວກເດັກນ້ອຍ:

- ເຮັດຈົດຫມາຍນ້ອຍໃຫ້ຂ້ອຍ ກ໊ໄປຫາຄະນະກຳມະການບໍລິ ຫານເມືອງແດ່!

- ກາລິນາ ອີວາໂນວິດ, ຢ່າວິນຂ້ອຍຫລາຍ, ຂ້ອຍມີວຽກອື່ນ ເຮັດໄດ໋... ບໍ່ແມ່ນຊິມີແຕ່ເລື່ອງແອ່ຍຂອງເຈົ້າເລື່ອງດຽວ!

- ເຈົ້າກະຂຽນໃຫ້ເຫາະແມ້! ມັນເສຍຫາຍຫຍັງຫວະ? ເຈົ້າ ເພງເຈັຍຊັ້ນຫວະຫລືວ່າແນວໃດ? ຂຽນຫັ້ນນ່າ... ແລ້ວເຈົ້າຊິ ເຫັນ, ຂ້ອຍຊິເອົາແອ່ງມາໃຫ້ໄດ້.

ຂ້າພະເຈົ້າຂຽນຫນັງສືໃຫ້ລາວອີກ. ເມື່ອຈັບໃບຫນັງສືຍັດເຂົ້າ ກົງແລ້ວ ກາລິນາ ອີວາໂນວິດ ກໍ່ຍົ້ມອອກ ແລະເວົ້າວ່າ:

- ບໍ່ມີກົດຫມາຍບ້າໆບໍ່ໆຂໍ້ໃດດອກ ທີ່ບອກໃຫ້ປະໃຫ້ກົ໋ມສິ່ງ ຂອງດິ໋ ຍ້ອນບໍ່ມີໃຜກຳກັບບັນຊາ. ມັນຫມົດຍຸກສະໄຫມເຈົ້ານາ ແລ້ວ.

ກາລິນາ ອີວາໂນວິດ ກັບຄືນມານິຄົມ ໃນຕອນເດິກ ໂດຍບໍ່ ແວ່ຮອດຫ້ອງຂ້າພະເຈົ້າ ຫລືແມ່ນແຕ່ຫ໋ໍພັກ. ມີແຕ່ຕອນເຊົ້າເທົ່ານັ້ນ ລາວຈົ່ງມາຫາຂ້າພະເຈົ້າຢູ່ຫ້ອງ ດ້ວຍທ່າທີສຸຂຸມເສີຍເມີຍ, ສາຍຕາແນມຜ່ານບ່ອງຢ້ຽມອອກໄປໄກໆ.

- ບໍ່ມີທາງເລີຍ! ລາວເວົ້າຂຶ້ນ, ນ້ຳສຽງແຫ້ງກະແດ້ງທັງເດ່ເຈ້ຍມາໃຫ້ຂ້າພະເຈົ້າ.

ເທິງແຜ່ນເຈ້ຍຂອງພວກເຮົາ ທີ່ເລາະລ່ອງເຂົ້າຫ້ອງນັ້ນອອກຫ້ອງນີ້ມີລາຍມືຂຽນດ້ວຍນ້ຳເມິກສີແດງຈະແຈ້ງພຽງຄຳດຽວ ທີ່ແສນໂຫດຫ້ຽມເດັດຂາດຄື "ປະຕິເສດ".

ການິນາ ອີວານໂນວິດ ເຈັບແສບຫົວໃຈຢູ່ຕັ້ງດົນ ຕະຫລອດເວລາສອງອາທິດກ່ວາຄວາມຄ່ອງໄວອັນຫນ້າກະຫນອມແພງແບບຄົນຊະລາຂອງລາວຫລຸດຜ່ອນແລະຫາຍສ້ຽງໄປ.

ໃນອັນອາທິດຕໍ່ມາ ເມື່ອຄວາມອົບອຸ່ນຂອງເດືອນມີນາ ກະທົບຍອກເຍົ້າກັບກອງຫິມະຢ່າງແຂງຂັນແລ້ວນັ້ນ ຂ້າພະເຈົ້າ ໄດ້ຊວນເອົາເດັກນ້ອຍຈຳນວນຫນຶ່ງໄປຍ່າງຫລິ້ນບໍລິເວນໃກ້ຄຽງ. ເມື່ອພວກເຮົາຫາແມວນຸ່ງອຸ່ນໆມາຫໍ່ຫຸ້ມໂຕແລ້ວ ພວກເຮົາຈຶ່ງພາກັນອອກຍ່າງໄປທາງເຄຫາສະຖານ ແຕຣບແກ.

- ເປັນຫຍັງເຮົາຈຶ່ງບໍ່ມາຕັ້ງນິຄົມໃສ່ຫນີ້? ຂ້າພະເຈົ້າເວົ້າຂຶ້ນແຮງໆ.

- ໃສ່ຫນີ້ ແປວ່າ ບ່ອນໃດ?

- ອ້ອກະໃນເຮືອນຫມູ່ນີ້ແລ້ວ!

- ໂອ້ຍຊິຢູ່ໄດ້ແນວໄດ໋...

- ກໍສ້ອມແປງເອົາລະບໍ.

ຊາໂດຣອບ ຫົວຂຶ້ນແຮງໆ ແລ້ວແລ່ນໄປຫາອ້ອມເດີ່ນ.

- ຢູ່ພຸ້ນກໍມີເຮືອນຕັ້ງສາມຫລັງທີ່ຕ້ອງສ້ອມແປງຢູ່ແລ້ວ, ມັນເວົ້າໃຫ້ຂ້າພະເຈົ້າຄຶດຄືນ, - ແລະພວກເຮົາບໍ່ມີທາງວ່າຊິເຮັດແລ້ວຕະຫລອດລະດູຫນາວນີ້.

- ອັນນັ້ນກະແມ່ນຢູ່! ແຕ່ສົມມຸດວ່າ ພວກເຮົາໄດ້ບ່ອນນີ້ແລ້ວ ຈັດການສ້ອມແປງມັນຫັ້ນເດ້!

- ຈັ່ງຊັ້ນກະຄັກລະບໍ້! ຊິເປັນນິຄົມແທ້ໆບ່ອນຫນ້ຳຢູ່ດອກນີ ທ້ຳ ນ້ຳຫ້ອຍ, ສວນຕົ້ນໄມ້ແລະໂຮງສີພ້ອມ!

ຂະນະທີ່ຍ່າງຍວບຢ້ຳໄປຕາມຊາກເພພັງຫັກຮ້າງນັ້ນ ພວກເຮົາ ກໍພາກັນຄຶດຝັນໄປວ່າ: ບ່ອນນີ້ເອົາເຮັດຫ້ນອນ, ບ່ອນພຸ້ນໂຮງອາ ຫານ, ຕໍ່ໄປເປັນສະໂມສອນໃຫຍ່ ແລະພຸ້ນເປັນໂຮງຮຽນ...

ພວກເຮົາກັບຄືນມານິຄົມຢ່າງອຶດເມື່ອຍ ແຕ່ຫາກເຕັມໄປດ້ວຍ ພະລັງແຮງ. ມີການໂອ້ລົມສົນທະນາກັນຢູ່ໃນຫ້ນອນຢ່າງອຶກກະ ທຶກບັນນອງ ເຖິງລາຍລະອຽດ ກ່ຽວກັບການກໍ່ຕັ້ງນິຄົມໃຫມ່. ກ່ອນຈະແຍກອອກກັນໃນຕອນກາງຄືນ, ເອົາເຕີຣີນາ ເວົ້າວ່າ:

- ພວກເຈົ້າເອີຍ ການຝັນຫາສິ່ງທີ່ບໍ່ອາດເປັນໄປໄດ້ນັ້ນບໍ່ມີ ດອກເດ້... ມັນບໍ່ແມ່ນທິດທາງຂອງພວກ ໂບນເຊວິກເລີຍ!

ຄວາມງວນຫົດແບບຫນ້າຫົນຫວຍຢ່າງຫນ້ຳ ຄອບງ້ຳໄປທົ່ວຫ້ ນອນ.

ຂ້າພະເຈົ້າກົ້ງຕາເບິ່ງຫນ້າ ເອົາເຕີຣີນາ ກຣີກໍເຮັບນາ ຢ່າງ ຮ້າຍໆ ທ້ຳຟາດກ້ຳປັ້ນໃສ່ໂຕະພ້ອມກັບບອກນາງວ່າ:

- ແຕ່ຂ້ອຍຂໍບອກເຈົ້າວ່າ ໃນເວລາອຶກຫນ້ຳເດືອນ ຂ້າງຫນ້ານີ້ ເຄຫາສະຖານບ່ອນນີ້ຈະກາຍມາເປັນສົມບັດຂອງພວກເຮົາ. ແບບ ນີ້ສອດຄ່ອງກັບທິດທາງ ໂບນເຊວິກບໍ່?

ພວກເດັກນ້ອຍພາກັນຫົວໂຄບຂຶ້ນທ້ຳຮ້ອງ "ໄຊໂຍ", ຂ້າພະ

ເຈົ້າເອງກໍຫິວ ແລະເອົາເຕີຣົນ ກຣິກໍເຮັບນາ ເອງກໍອົດຫິວບໍ່ຟັງ ຄືກັນ.

ຂ້າພະເຈົ້າໃຊ້ເວລາຕະຫລອດຄືນຫນຶ່ງເຕັມໆ ເພື່ອຂຽນລາຍ ງານສະບັບຫນຶ່ງສົ່ງເກົ້າຄະນະກຳມະການບໍລິຫານງານແຂວງ.

ຫລັງຈາກນັ້ນອາທິດຫນຶ່ງ, ຫົວຫນ້າພະແນກສຶກສາປະຊາຊົນ ປະຈຳແຂວງ ກໍເອີ້ນຂ້າພະເຈົ້າໄປພົບ.

- ແນວຄວາມຄຶດຂອງເຈົ້າເຂົ້າທ່າດີ, ໄປເບິ່ງສະຖານທີ່ນຳກັນ ເນາະ!

ອາທິດຫນຶ່ງຜ່ານໄປອີກ ແລະໂຄງການຂອງພວກເຮົາກໍຂຶ້ນເກົ້າ ມືຄະນະກຳມະການບໍລິຫານງານແຂວງ.

ຜົນປາກົດວ່າ ອຳນາດການປົກຄອງໄດ້ເສຍເວລານຳຊາຕາກຳ ຂອງເຄຫາສະຖານແຫ່ງນີ້ມາແຕ່ດົນແລ້ວ. ຂ້າພະເຈົ້າຈຶ່ງມີໂອກາດ ພົບລະນາເກົ້າຄວາມທຸກໄຮ້ຂາດເຂີນ, ສະພາບທົ່ວໄປຂອງນິ ຄົມພວກເຮົາສູ່ພວກເພື່ນຟັງ ທັ້ງເນັ້ນເກົ້າແບບແຜນການດຳລົງຊີ ວິດຮອມຫມູ່ທົ່ວໄປໃນນິຄົມແຫ່ງນີ້ພ້ອມ.

ປະທານຄະນະກຳມະການເວົ້າຂຶ້ນວ່າ:

- ສະຖານທີ່ນີ້ຕ້ອງການຜູ້ຄຸມຄອງ, ແລະບັດນີ້ກໍມີຄົນຢາກເຮັດ ວຽກນີ້ແລ້ວ, ຍົກໃຫ້ພວກເຂົາໄປເລີຍ!

ບັດນີ້ ຂ້າພະເຈົ້າມີໃບອະນຸຍາດເປັນເຈົ້າກຳມະສິດເຄຫາສະຖານ ຂອງຄອບຄົວ ແຕຣບແກພ້ອມດ້ວຍທີ່ດິນຂະຫນາດ 30 ເດເຊຍ ຕິນ ແລະງົບປະມານສຳລັບສ້ອມແປງ ຢູ່ໃນກຳມືແລ້ວ. ຂ້າພະເຈົ້າ ຢືນຢູ່ກາງຫ້ອງແລະ ເກືອບບໍ່ຢາກເຊື່ອວ່າ ທັ້ງຫມົດນີ້ບໍ່ແມ່ນ

ຄວາມຝັນ, ຢູ່ອ້ອມໂຕຂ້າພະເຈົ້າໃນເວລານັ້ນ ແມ່ນກຸ່ມເດັກນ້ອຍ ທີ່ພວມຕື່ນເຕັ້ນຟົດຟື້ນ, ພວກເຂົາເດ່ມືມາເປັນສອນລອນ...

- ໃຫ້ພວກເຮົາເບິ່ງແດ່!

ເອົາກາຕີຣີນາ ຍ່າງເຂົ້າມາ ພວກເດັກນ້ອຍຫຸ້ມໄປຫາ ນາງ ທ້າວ ເວົ້າສໍ້ສົນຂຶ້ນ ທ່າມກາງສຽງນັ້ນນອງນັ້ນ ສຽງເສາະໃສຂອງ ເຊລາປູຕິນ ກໍສອດຖ້ອງໜ້ອງໝູ່ວ່າ:

- ມັນສອດຄ່ອງກັບທິດທາງຂອງພວກໂບນເຊວິກບໍ?

- ແມ່ນຫຍັງກັນ? ມີຫຍັງຊັ້ນຫວະ?

- ແມ່ນທິດທາງ ໂບນເຊວິກ ບໍ? ເບິ່ງແມ້! ເບິ່ງເອົາແມ້!

ກາລິນາ ອິວາໂນວິດ ເປັນຜູ້ມີຄວາມສຸກກວ່າໝູ່:

- ເຈົ້າຫນໍ້ມັນຍອດຄົນແທ້ໆເລີຍລະ, ຄືພະເພິ່ນວ່າໄວ້ບໍ່ຜິດ: ຈົ່ງຂໍແລ້ວຈະໄດ້, ຈົ່ງຂໍແລ້ວຈະໄດ້, ຈົ່ງເຄາະປະຕູແລ້ວເພິ່ນຈະໄຂ ໃຫ້. ลก.

- ໃຫ້ຫຍັງ? ໃຫ້ໄມ້ຄ້ອນຫັ້ນຕິ! - ຊາໂດຣອບ ສອດຂຶ້ນ.

- ມັນບໍ່ແມ່ນໄມ້ຄ້ອນດອກເດ້! - ເວົ້າແລ້ວ ກາລິນາ ອິວາໂນ ວິດ ງວາກໄປຫາມັນ - ເບິ່ງຕິ... ມັນແມ່ນຄຳສັ່ງ...

- ເຈົ້າຫັ້ນເດ້ ຫວ່າງໄປເຄາະປະຕູຂໍແອ່ງເຫລັກຫັ້ນ ເພິ່ນຄື ເອົາແຕ່ໄມ້ຄ້ອນໃຫ້ເຈົ້າ. ແຕ່ບັດນີ້ ມັນແມ່ນເລື່ອງທີ່ລັດຖະບານ ໃຫ້ຄວາມສົນໃຈ ມັນບໍ່ແມ່ນຍ້ອນວ່າພວກເຮົາຂໍໄປດອກ...

- ນ້ຳຫັ້ນຍັງນ້ອຍໂພດ ນ້ຳບໍ່ທັນເຂົ້າໃຈເລື່ອງສາສະນາຫຍັງ ດອກ, - ກາລິນາ ອິວາໂນວິດເວົ້າຍອກຄືນ ເພາະວ່າບັດນີ້ ໃນນາ

ທີ້ນີ້ ບໍ່ອາດມີແນວໃດອີກແລ້ວ ທີ່ຈະເຮັດໃຫ້ລາວ ໂມໂຫໂຫໂສ ຂຶ້ນໄດ້.

ວັນອາທິດຕໍ່ມາ ລາວກັບເດັກນ້ອຍກຸ່ມຫນຶ່ງ ຕິດຕາມຂ້າພະເຈົ້າໄປກວດກາເບິ່ງສົມບັດຕ່ອນໃຫມ່ຂອງພວກເຮົາ. ກາລິນາ ອີວາໂນວິດ ພົ້ນຄ້ວນທັ່ງໃສ່ກ້ອນຫີນກ້ອນອິດແຕ່ລະກ້ອນຂອງເຄຫາຮ້າງ ແຕຣບແກ ໃນທ່ວງທ່າຂອງຜູ້ມີໄຊ ຍ່າງກາຍແອ່ວເຫລັກຢ່າງສະຫງ່າຜ່າເຜີຍ.

-ປານໃດພວກເຮົາຈຶ່ງຊິເອົາແອ່ງນີ້ໄປ, ກາລິນາ ອີວາໂນວິດ? - ບູຮູນ ກາມຂຶ້ນຢ່າງເຄັ່ງຂຶມ.

-ແລ້ວຊິໄປຍ້າຍບ່ອນມັນເຮັດຫຍັງລະຫື? -ກາລິນາ ອີວາໂນວິດ ຕອບຄືນ, -ມັນຢູ່ຫນີ້ ກໍດີແລ້ວລະ, ມຶງເຫັນບໍ່, ມັນເຮັດຄອກມ້ານີ້ ມີລະບົບລະບາຍນ້ຳພ້ອມ? ເຫມາະກັບຄວາມຕ້ອງການທາງດ້ານວິທະຍາສາດໃຫມ່ອ່ຽມນ່າ!

ບົດທີ ກ

"ຫລາຍຄົນດີ ຫລາຍຜີແກມໄກ່"

ພວກເຮົາຍັງບໍ່ສາມາດເວົ້າໄດ້ຢ່າງເຕັມປາກເຕັມຄຳ ເກົ່າການພິຊິດຍາດແຍ່ງເອົາມູນມໍລະດົກຂອງຕະກູນ ແຕຣບແກ ໄດ້ເທື່ອ. ດ້ວຍເຫດຜົນຫລາຍປະການ ການສົ່ງເງິນແລະວັດຖຸກໍ່ສ້າງໄດ້ຊັກຊ້າໄປ. ອຸປະສັກຕົ້ນຕໍກໍແມ່ນນ້ຳທ້ວຍ ໂກໂລນາກ ເຊົ່ງເກົ່າອ່ານ້ອຍ ແຕ່ຊ້ຳກາຍເປັນຕິ່ວນານຂອງພວກເຮົາ. ໃນເດືອນເມສາ ເຊັ່ນນີ້ ກະແສນ້ຳທີ່ຂວາງກັ້ນພວກເຮົາກັບເຄຫາສະກາມ ແຕຣບ

ແກ ໄຫລແຮງຊຸ້ນຂ້ອງອພປານນ້ຳໂຕນຕາດ. ຕອນທຳອິດ ມັນ ຄ່ອຍໆນອງຂຶ້ນເລື້ອຍໆທັ້ງແກ່ຍາວຢູ່ຢ່າງຄົ້ງ ຈາກນັ້ນຈຶ່ງໄຫລຄືນ ກັບອູ່ຂອງມັນຢ່າງຊ້າໆກ່ວາເກົ່າ ປະປ່ອຍແນວອຸບາດຊະນິດໃຫມ່ ໄວ້ຄ້ຶຕົ້ມແຫລວໆຊະນິດບໍ່ສາມາດຢ່າງຫລ້ຶກ້ວງນຜ່ານໄດ້.

ຍ້ອນແນວນ້ຶ້ແລ້ວ "ແຕຣບແກ", ຕ່ອນສິນັດຍັນໃຫມ່ ທ່ີ ພວກເຮົາຂະຫນານນາມໃຫ້ ຈ່ຶ່ຍັງຄົງເປັນບ້ານຮ້າງຢູ່ໄປດົນເຕ ືບ. ໃນລະດູນ້ ພວກເດັກນ້ອຍຕ່າງກ ່ໍ ຊ ຸ ມ ຊ ຸ ມ ອ ອ ນ ຊ ອ ນ ນ ໍ າ ສ ະ ເ ຫ ນ ຂ ອ ງ ລະດູບານໃຫມ່. ຕອນເຊ ົ ້ າ ຫ ລ ັ ງ ຈ າ ກ ກ ິ ນ ເ ຂ ົ ້ າ ແ ລ ້ ວ ຂ ະ ນ ະ ທ ່ ີ ລ ໍ ້ ກ ້ າ ສ ງ ກ ະ ແ ລ ່ ງ ເ ຮ ັ ດ ວ ງ ກ , ພ ວ ກ ເ ຂ ົ າ ພ າ ກ ັ ນ ໄ ປ ລ ວ ມ ແ ກ ອ ປ ານ ກ ໍ ຜ ັ ກ ບ ົ ່ ອ ໃ ນ ຫ ນ ານ ຢ ູ ່ ໃ ນ ຫ ້ ອ ງ ໃ ຕ ້ ຂ ່ ໍ ເ ພ ື ່ ອ ຕ າ ກ ແ ດ ດ , ຍ ຶ ດ ເ ອ ົ ກ ໃ ສ ່ ແ ດ ດ ແ ລ ະ ໂ ຍ ນ "ເ ສ ື ້ ອ ກ ັ ນ" ກ ໍ ມ ລ ິ ງ ໃ ສ ່ ເ ດ ີ ນ ຢ ່ າ ງ ບ ໍ ່ ອ າ ໄ ລ ໄ ຍ ດ ີ . ພ ວ ກ ເ ຂ ົ າ ສ າ ມ ານ ັ ່ ງ ຢ ູ ່ ຈ ່ ຳ ຊ ຸ ້ ນ ຫ ລ າ ຍ ຊ ົ ່ ວ ໂ ມ ງ ເ ພ ື ່ ອ ທ ົ ດ ແ ທ ນ ອ ັ ນ ເ ວ ລ າ ໃ ນ ລ ะ ດ ู ຫ ນ າ ວ ເ ຊ ົ ່ ໍ ແ ມ ່ ນ ແ ຕ ່ ຢ ູ ່ ໃ ນ ເ ຮ ື ອ ນ ຫ ໍ ນ ອ ນ ເ ອ ງ ເ ພ ິ ່ ນ ກ ໍ ບ ໍ ່ ສ າ ມ າ ດ ເ ຮ ັ ດ ໃ ຫ ້ ອ ິ ບ ອ ຸ ່ ນ ໄ ດ ້ .

ສ ງ ກ ະ ແ ລ ່ ງ ເ ຮ ັ ດ ໃ ຫ ້ ພ ວ ກ ເ ຂ ົ າ ລ ຸ ກ ຈ າ ກ ບ ່ ອ ນ ນ ອ ນ ແ ລ ະ ອ ອ ກ ໄ ປ ຫ າ ວ ง ກ ง ານ ຕ າ ມ ຫ ນ ້ າ ທ ່ ີ ໃ ຜ ມ ັ ນ , ແ ຕ ່ ພ ວ ກ ເ ຂ ົ າ ກ ໍ ຍ ັ ງ ສ າ ມ າ ດ ຫ າ ຂ ໍ ້ ອ ້ າ ງ ຫ ລ ິ ບ ອ ອ ກ ໄ ປ ຕ າ ກ ແ ດ ດ ໄ ດ ້ ແ ມ ່ ນ ແ ຕ ່ ໃ ນ ເ ວ ລ າ ເ ຮ ັ ດ ວ ง ກ ຮ ອ ດ ສ ອ ง ຫ ລ ื ສ າ ມ ເ ທ ื ່ ອ .

ໃ ນ ຕ ้ ົ ນ ເ ດ ື ອ ນ ເ ມ ສ າ ອ າ ສ ะ ກ າ ໂ ປ ແ ລ ດ ລ ຸ ກ ໄ ດ ້ ຫ ລ ິ ບ ຫ ນ ີ ຈ າ ກ ນ ິ ຄ ົ ມ . ຫ ມ ໍ ນ ້ ີ ບ ໍ ່ ແ ມ ່ ນ ສ ะ ມ າ ຊ ິ ກ ນ ິ ຄ ົ ມ ຜ ู ້ ເ ປ ັ ນ ຕ າ ເ ສ ຍ ດ າ ຍ ດ ອ ກ . ຂ ້ າ ພ ะ ເ ຈ ົ ້ າ ຮ ັ ບ ມ ັ ນ ມ າ ຫ ວ ่ າ ง ເ ດ ื ອ ນ ທ ັ ນ ວ າ ແ ລ ้ ວ ນ ้ ี , ຂ ะ ນ ะ ນ ั ้ ນ ຂ ้ າ ພ ะ ເ ຈ ົ ้ າ ໄ ປ ເ ກ ິ ง ພ ะ ແ ນ ກ ສ ึ ก ส า ก ็ พ บ อ ่ า ย ู ่ อ ้ อ ม โ ต ะ ห น ่ อ ย ห น ึ ่ ง , ผ ู ้

ຄົນກຸ່ມຫນຶ່ງກໍາລັງຫຸ້ມລ້ອມເດັກນ້ອຍຄົນຫນຶ່ງ ເຊິ່ງຫນ້າເປີເປື້ອນ ແລະນຸ່ງເຄື່ອງຂາດລ້ອຍ. ພະແນກເດັກດ້ອຍປັນຍາຢືນຢັນວ່າມັນ ເປັນພະຍາດກ່ອກັບປະສາດຢ່າງຫນຶ່ງ ແລະກໍາລັງຈະສົ່ງມັນໄປຍັງ ເຮືອນປົ່ນປົວສະເພາະຢູ່ແລ້ວ. ບັກນ້ອຍໄຮ້ຍາດ ຮ້ອງໄຫ້ບ່ຍອມ ທ້ໍາປະຕິເສດວ່າມັນບໍ່ໄດ້ເປັນບ້າຈັກຫນ້ອຍ, ວ່າເພິ່ນຈັບມັນມາໃນ ເມືອງກໍ້ຍ້ອນເຂົ້າໃຈຜິດແລະວ່າເພິ່ນຄວນສົ່ງມັນໄປຍັງ ກຣາດສະ ໂນດາ, ບ່ອນທີ່ເພິ່ນສັນຍາວ່າຈະໃຫ້ມັນເຂົ້າໂຮງຮຽນ.

- ນ້ໍາຮ້ອງເຮັດຫຍັງ? - ຂ້າພະເຈົ້າຖາມມັນ.

- ພວກເຂົາພາກັນວ່າ ຂ້ອຍເປັນບ້າຫັ້ນເດ້.

- ກູໄດ້ຍິນແລ້ວ, ເຊົາສາ, ມາໄປນ້ໍາກັນ.

- ຊ້ໍໄປແນວໃດ?

- ກະຍ່າງໄປຫນ້ໍ້ແຫລ້ວ, ມາ!

- ກະດ້ໍ້ກັນ!

ເວົ້າແທ້ແລ້ວ ມັນບໍ່ມີວ່າດ້ໍ້ຄົນມີສະຕິປັນຍາຈັກຫນ້ອຍ ເລີຍ ແຕ່ເບິ່ງມັນ ກ້ໍເຂົ້າໃຈໂລດວ່າມັນມີກໍ້ລັງໃຈອັນໃຫຍ່ຫລວງ ແລະຂ້າພະເຈົ້າກ້ໍ້ຄິດວ່າ: "ຈັ່ງໃດກ້ໍ່ຢ່າເທາະ, ແຕ່ລະຄົນ ຍ່ອມມີ ອັນດີຢ່າງຫນຶ່ງ".

ພະແນກເດັກດ້ອຍປັນຍາຫັນໃຈໂລ່ງດ້ວຍຄວາມພໍໃຈທີ່ສາມາດ ກໍາຈັດພາລະອັນນ້ໍ້ອອກໄປ, ຈາກນັ້ນພວກເຮົາພາກັນອອກຍ່າງຢ່າງ ຟ້າວຟັ່ງກັບມານິຄົມ. ໃນເວລາຍ່າງມານັ້ນ ມັນໄດ້ເລົ່າເລ່ືອງຊີວິດ ເດັກຕິດໄພ້ສັງຄົມຂອງຕົນສູ່ຂ້ອຍຟັງ ຄືເລ່ີມຕົ້ນດ້ວຍການຕາຍຂອງ ພໍ່ແມ່ແລະຄວາມທຸກຍາກ. ມັນມີຊ່ື່ວ່າ ວາສະກາ ໂປແລດຊຸກ.

ຟ້ງມັນເວົ້າແລ້ວ ກໍຢາກເຂົ້າໃຈວ່າ ມັນເຄີຍບາດເຈັບໃນສົງຄາມ ແລະໄດ້ຮ່ວມໃນບັ້ນບຸກຣົບຢູ່ ເປເຣກົບ.

ນາຢູ່ນິຄົມໄດ້ມື້ດຽວເທົ່ານັ້ນ ມັນກໍກາຍເປັນຄົນປາກກ້ຳໄປເລີຍ, ບໍ່ມີໃຜຈັກຄົນ ບໍ່ວ່າຄູສອນຫມູ່ເພື່ອນຂອງມັນ ເຮັດໃຫ້ມັນອ້າປາກໄດ້. ແມ່ນຍ້ອນສະພາບແນວນີ້ແລ້ວທີ່ບັງຄັບໃຫ້ພວກນັກປາດອາຈານ ຕີລາຄາວ່າມັນເປັນເດັກດ້ອຍປັນຍາ.

ພວກເດັກນ້ອຍອື່ນໆສົນໃຈໃນອາການງຽບຂອງມັນ ແລະ ຂໍອະນຸຍາດນຳຂ້າພະເຈົ້ານຳໃຊ້ວິທີການພິເສດບາງ ຢ່າງກັບມັນເຊັ່ນ ວ່າຈຳເປັນຕ້ອງເຮັດໃຫ້ມັນຕື່ນຕົກໃຈຢ່າງແຮງ ຈັ່ງຊັ້ນມັນກໍຈະປາກໂລດ. ຂ້າພະເຈົ້າຫ້າມໃຊ້ທຸກໆວິທີການຢ່າງເດັດຂາດ. ນອກນີ້ ຂ້າພະເຈົ້າຍັງຄຶດເສຍໃຈທີ່ເອົາລີສີປາກກ້ຳອັນນີ້ມາໄວ້ນິຄົມນຳ.

ແຕ່ແລ້ວ ນາຮອດມື້ຫນຶ່ງ ໂປແລດຊຸກກໍປາກ ແລະປາກອອກ ມາຢ່າງບໍ່ມີເຫດມີຜົນອັນໃດຫນຶ່ງ. ກໍພຽງແຕ່ວ່າມື້ນັ້ນ ເປັນວັນ ຫນຶ່ງໃນລະດູບານໃຫມ່ທີ່ມີອາກາດອົບອຸ່ນ, ກິ່ນອາຍຂອງດິນແຫ້ງ ລອຍອົບອວນຢູ່ກາງແສງແດດ. ມັນເວົ້າແບບຂີ້ຂ້ຽນແຮງປະກອບ ດ້ວຍສຽງຫົວ ແລະໂດດເຕັ້ນເປັນບາດ. ຕະຫລອດມື້ຕະຫລອດເວັນ ມັນນຳຂ້າພະເຈົ້າບໍ່ຫ່າງພໍ້ກ້າວ, ວົນວຽນຢູ່ແຕ່ນຳການຄຸຍ ເກີ່ງສະເນ່ຂອງຊີວິດໃນກອງທັບແດງ ແລະນາຍທະຫານຊື່ ຊູບາດ.

- ຄົນພິລຶກແທ້ໆໄດ໋! ແກ່ນຕາລາວເປັນສີຟ້າຊ້ຳ... ຊ້ຳຈົນວ່າ ເຮັດໃຫ້ຂົນຫນາວແຕກຟຸ້ນລະບັດລາວກ້ຳຕາເບິ່ງນະ, ເມື່ອລາວໄປ ເປເຣກົບ ທັ້ນພວກເຮົາຫມົດທຸກຄົນພາກັນຢ້ານລາວຫມົດ...

- ເປັນຫຍັງມ໊ຶ່ຈ໋ຶ່ງເວົ້າຮອດ ແຕ່ອ໋ຶ່ຕາ ຊູບາດ ນ໋ຶ້ແທ້?

- ພວກເດັກນ້ອຍກາມຂຶ້ນ, - ມ໊ງຮູ້ບ່ອນຢູ່ລາວບໍ?

- ບ່ອນຢູ່ໃຜ? ສູເວົ້າເລື່ອງຫຍັງ?

- ກະບ່ອນຢູ່ຂອງລາວເພື່ອວ່າມ໊ງຊິໄດ້ຂຽນຈົດໝາຍໄປຫາລາວຫັ້ນເດ:

- ບໍ່, ຈຳເປັນຫຍັງກູຊິຕ້ອງຮູ້, ຮູ້ໄປເຮັດຫຍັງ? ກູຊິໄປ ຫານ໊ໂກລາຍເຢັບ ເອງ, ໄປຮອດແລ້ວກໍຫາກຊິພໍ້ລາວເອງ.

- ລາວມີແຕ່ຊິໄລ່ມ໊ງຫນີຫັ້ນແລ້ວ!

- ລາວບໍ່ໄລ່ດອກ, ເທື່ອແລ້ວແມ່ນເກົ້າຫນ໋ຳພຸ້ນໄລ່ກູຫນີ, ຍັນເວົ້າ "ເອົາບັກຂີ້ສູດນ້ອຍນີ້ໄວ້ກອນປະສາດເຮັດຫຍັງເວີ້ຍ?" ຮ໊, ເວົ້າປານວ່າກູເປັນບັກຂີ້ສູດ!

ແຕ່ເຊົ້າເທົ້າຄ່ຳ ໂປແລດຊຸກ ເວົ້າຮອດແຕ່ ສຸບາດ ໃຫ້ຂ້າພະເຈົ້າຟັງ, ເວົ້າຮອດຄວາມສະຫງ່າງາມ ແລະຄວາມກ້າຫານຂອງເຂົາ ແລະມັນບໍ່ໃຊ້ຄຳຫຍາບຊ້າຈັກເທື່ອ.

ພວກເດັກນ້ອຍກາມມັນຢ່າງກ໋ງໄປກ໋ງມາວ່າ:

- ມ໊ງຫມາຍຄວາມວ່າ ມ໊ງຊິໂຕນຫນີຊັ້ນຫວະ?

ໂປແລດຊຸກ ແນມເບ໋ງຂ້າພະເຈົ້າ ແລະຄຶດຝັນໄປຕາມອາລົມຂອງມັນ. ມັນຄຶດຢູ່ດົນຈົນວ່າບໍ່ມີໃຜຄຶດເກ໋ງມັນອີກແລ້ວ ແລະໃຜໆກໍພາກັນລືມເກ໋ງເລື່ອງອື່ນໆແລ້ວ ມັນຈ໋ງຄາດລາດກາມຜູ້ຕ໋ງບັນຫາກັບມັນວ່າ:

- ແລ້ວອານໂຕນ ຈະຮ້າຍບໍ່ລະ?

- ຮ້າຍເລື່ອງຫຍັງ?

- ເລື່ອງ... ຄັນວ່າກູເປີດຫນີຫັ້ນນ່າ.

- ນ້ຶງຄິດວ່າລາວຊື່ອອນຊອນຊັ້ນຫວະ... ສິນລາວຊິມາເສຍເວ ລານຳນ້ຶງຕ່ວາ!

ວາສະກາ ຄິດລອຍໄປນຳຄວາມຝັນຂອງມັນອີກ.

ແລະແລ້ວມາຮອດມື້ຫນ້ຶງ, ຫລັງຈາກປັ້ນເຊົ້າແລ້ວ, ເຊລາປູ ຕີນ ກໍແລ່ນມາຫາຂ້າພະເຈົ້າ:

- ວາສະກາ ຫນີຈາກນິຄົມແລ້ວ... ບໍ່ກົນຮອດເຂົ້າ. ມັນເປີດ ແລ້ວ, ມັນນຳໄປຫາເກົ້າຊູບາດ!

ພວກເດັກນ້ອຍແຫ່ກັນມາຫຸ້ມຂ້າພະເຈົ້າຢູ່ກາງເດີ່ນ, ພວກເຂົາ ສົນໃຈຢາກຮູ້ວ່າ ຂ້າພະເຈົ້າຈະມີປະຕິກິລິຍາແນວໃດຕໍ່ການໂຕນຫນີ ຂອງ ວາສະກາ.

- ຈັ່ງໃດຫມໍ ໂປແລດຊຸກ ກໍເປີດຫນີແລ້ວລະ...

- ເປັນຍາມລະດູບານໃຫມ່ແລ້ວເດ້...

- ມັນຊິໄປ ກຶມ ພຸ້ນໄດ໋...

- ບໍ່ນ່າ, ມັນບໍ່ໄປກຶມດອກ, ມັນໄປເມືອງ ນິໂກລາຍເຢັບ.

- ຄັນໄປສະການີລິດໄຟດວງນີ້ ອາດຊິນຳມັນທັນບໍ່ຈັກ...

ເຖິງແມ່ນວ່າ ວາສະກາ ເປັນສະມາຊິກນິຄົມຜູ້ບໍ່ຫນ້າປາດຖະ ຫນາປານໃດກໍຕາມ ແຕ່ການໂຕນຫນີຂອງມັນກໍຫາກເຮັດໃຫ້ຂ້າພະ ເຈົ້າຮູ້ສຶກເຈັບປວດຫົວໃຈຢ່າງຮຸນແຮງ. ມັນເປັນຫນ້າຄວດ ແຄ້ນ ແລະຂົມຂື່ນໃນຫົວໃຈທີ່ເຫັນວ່າຄົນຜູ້ນີ້ບໍ່ຍິນຍອມຮັບເອົາ ການເສຍສະຫລະອັນເລັກນ້ອຍໆຂອງພວກເຮົາ ແລະເປີດຫນີໄປ ຊອກຫາສິ່ງທີ່ດີກ່ວາ. ໃນເວລາດວງອັນນີ້ ຂ້າພະເຈົ້າຮູ້ວ່າຄວາມ

ທຸກຍາກຂາດເຂີນຢູ່ພາຍໃນນິຄົມຂອງພວກເຮົາບໍ່ອາດດຶງຈ່ອງຜູ້ໃດ ໄວ້ໄດ້.

ຂ້າພະເຈົ້າບອກກັບພວກເດັກນ້ອຍວ່າ:

-ມັນໄປທາງໃດກໍຢ່າຫ້ອມັນເທາະແມ້! ຖ້າຫາກວ່າມັນໄປ ແລ້ວ ກໍແລ້ວໄປ! ພວກເຮົາຍັງມີວຽກອື່ນໆທີ່ສຳຄັນກ່ວານີ້ອີກ.

ຮອດເດືອນເມສາ, ກາລີນາ ອີວາໂນວິດ ກໍລົງມືໄກນາ, ເຫດການດັ່ງກ່າວເກີດຂຶ້ນຢ່າງບໍ່ຄາດຝັນ. ຄະນະກຳມາທິການ "ເດັກນ້ອຍຕິດໄພສັງຄົມ" ຈັບເດັກນ້ອຍລັກມ້າໄດ້ຄົນຫນຶ່ງ, ມັນ ຖືກສົ່ງໄປບ່ອນໃດບ່ອນຫນຶ່ງແລ້ວ ແຕ່ພວກເພິ່ນບໍ່ຮູ້ວ່າໃຜເປັນເຈົ້າ ຂອງມ້າ. ທາງຄະນະກຳມາທິການທົບທໍລະມານຢູ່ຕະຫລອດວ ທິດ, ທັງນີ້ຍ້ອນບໍ່ຊິນເຄີຍກັບກໍລະນີທີ່ມີພະຍານຫລັກຖານຈະແຈ້ງ ຄືແນວນີ້. ກາລີນາ ອີວາໂນວິດ ໂປໂລເຂົ້າໄປຖືກຈັງຫວະພໍດີ, ເຫັນສະພາບການອັນສຸດແສນທໍລະມານ ແລະສະພາບອັນຫນ້າສົມ ເພດຂອງມ້າ ເຊິ່ງບໍ່ຮູ້ເລື່ອງຮູ້ລາວອັນໃດນຳ ແລະໄດ້ຢືນຂາແຂງຢູ່ ກາງເດີ່ນ, ໂດຍບໍ່ເວົ້າຈາຫຍັງຈັກຄວາມ ລາວໄປຈູງເອົາມ້າຍ່າງມານິ ຄົມຊຶ່ງ. ພວກຄະນະກຳມະການອອກມາສົ່ງລາວ ແລະຫັນໃຈໃຫຍ່ ດ້ວຍຄວາມປອດໂປ່ງໃຈ.

ຢູ່ທີ່ນິຄົມ ພວກເດັກນ້ອຍໃຫ້ການຕ້ອນຮັບ ກາລີນາ ອີວາໂນ ວິດ ຢ່າງຟົດຟື້ນ ແລະສຽງຮ້ອງອຸທານດ້ວຍຄວາມແປກໃຈ. ດ້ວຍ ມືອັນສັ່ນເຊັນ, ກູດຮັບເອົາເຊືອກມ້າຈາກມືຂອງຊາຍຊະລາພ້ອມໆ ກັບຄຳສັ່ງອັນເດັດຂາດຈາກ ກາລີນາ ອີວາໂນວິດ ກໍດັງກ້ອງເຊື່ອມ ຊຶມລົງໃນສ່ວນເລິກດວງວິນຍານຂອງເຂົາວ່າ:

-ນ້ຶງລະວ້ງໃຫ້ດີໆເດ້ ບັດນີ້! ບໍ່ແມ່ນວ່ານ້ຶງຊິເຮັດກັບມັນ ຄື ເຮັດກັບພວກຫມູ່ນ້ຶງເດ້! ມັນແມ່ນສັດປາກບໍ່ໄດ້ໄອບໍ່ດົງ, ສູທຸກ ຄົນຮູ້ດີຢູ່ແລ້ວ, ແຕ່ຄັນຫາກວ່ານ້ຶງຕີນ້ຶງຂ້ຽນມັນ ແລ້ວມັນເອົາລີ້ນ ຕີນຟາດຫົວຈັກບາດ ນ້ຶງກໍບໍ່ຕ້ອງແລ່ນໄປພ້ອງ ອານໂຕນ ເຊນ ໂນວິດ ດອກ. ນ້ຶງອາດຊິໃຫ້ນ້ຳຕາເປັນເລືອດ ຫລືບໍ່ມີນ້ຳຕາຈັກ ຢອດກໍຕາມ, ນ້ຶງມາແກ້ກັບກູພີ້ ແລ້ວກູຊິຈັດການຍ້າຍຫົວນ້ຶງອອກ ຈາກບ່າໃຫ້ເບິ່ງ!

ພວກເຮົາພາກັນຍືນອ້ອມກຸ່ມປະສົບໄຊກຸ່ມນ້ອຍໆ, ບໍ່ມີໃຜຈັກ ຄົນອ້າປາກປະທ້ວງຕໍ່ວ່າຕໍ່ຂານກ່ຽວກັບອັນຕະລາຍທີ່ຫນ້າເກງກົວ ທີ່ ອາດຈະເກີດຂຶ້ນກັບຫົວຂອງກູດ. ກາລິນາ ອິວາໂນວິດ ຍົ້ມແຍ້ມ ຢ່າງແຈ່ມໃສ, ກ່າວຄຳປາໄສຂົ່ມຂູ່ອັນນ້ີທ້ັງຄາບກອກ. ນ້ຳຕົ້ນນ້ີ ເປັນນ້ຳພັນປະສົມ ຍ້ັງຫນຸ່ມແຫນ້ນ ແລະອ້ອນງາມສົມຄວນ.

ກາລິນາ ອິວາໂນວິດ ວິນອງນຢູ່ໃນໂຮງນ້ຽນກອງນຫລາຍນ້ຶ ເຕີບ ເພື່ອສ້ອມແປງສິ່ງຕ່າງໆກັບພວກເດັກນ້ອຍ. ອາໄສຄ້ອນຕີ, ເຫລັກບິດທ່ອນເຫລັກລ້າໆ ປະກອບດ້ວຍຄຳປາໄສຊະນິດເລິກແລບ ຈາກສິ່ງເສດເຫລືອທຸກແບບທຸກແນວ ເຊ່ິງນິຄົມເກົ່າປະກ້ຶມໄວ້, ລາວກໍສາມາດປະດິດສ້າງສິ່ງຫນ່ຶງອອກມາຄ້າຍຄືຫມາກສົບໄກ.

ແລະແລ້ວ ພວກເຮົາກໍສາມາດຊ່ຶນຊົມຕໍ່ພາບອັນຫນ້າອອນຊອນ ນ້ີ: ບູຣູນ ກັບຊາໂດຣອບເປັນຜູ້ໄກ ສ່ວນ ກາລິນາ ອິວາໂນວິດ ຢ່າງຕິດຕາມພວກເຂົາມາຢູ່ຂ້າງໆທ້ັງເວ້ົາວ່າ:

-ອ່າ ພວກຜາກເອ້ີຍ ບໍ່ຮູ້ຮອດໄກນາ. ເບ່ິງຕົ້ຫມາກສົບໄກ ນ້ຶງບໍ່ຈຸດີນຊ້ຳນ່າ... ຊຸກລ່ິງອີກ... ອີກ...

ພວກເດັກນ້ອຍພາກັນກຸງລາວຄຶດແບບໃຈເຢັນວ່າ:

-ຊັ້ນເຈົ້າສາທິດໃຫ້ພວກເຮົາເບິ່ງແດ່ດຸ ກາລິນາ ອິວາໂນວິດ. ເຈົ້າເອງກໍຄືຊິຄືກັນນັ້ນແລ້ວ ບໍ່ເຄີຍໄກນາຈັກເທື່ອວ່າແດ່!

ກາລິນາ ອິວາໂນວິດ ດຶງກອກອອກຈາກປາກ ແລະພະຍາຍາມວາງທ່າທາງໃຫ້ຂຶງຂັງຮ້າຍຮຶນ.

-ແມ່ນຫຍັງເກາະ? ກູນີ້ຫວະບໍ່ເຄີຍໄກນາເນາະ? ແລ້ວມັນຈຳເປັນຫຍັງລະວ່າຕ້ອງເຄີຍໄກມາດ້ວຍຕົວເອງແລ້ວທໍ່ນັ້ນ ອັນນີ້ໝາຕ້ອງເຂົ້າໃຈເດີ! ກູເບິ່ງຮູ້ວ່າໝາຫັ້ນເຮັດບໍ່ກົກ ສ່ວນໝາງນີ້ ໄດ້ເລື່ອງແລ້ວ.

ກູດ ກັບ ບຮາເຊັ້ນໂກ ຍ່າງຕິດຕາມພວກເຂົາຢູ່ອີກຟາກຫນ້ຳ. ກູດນັ້ນແນມນຳພວກໄກນາບໍ່ວາງຕາຍ້ອນຢ້ານພວກເຂົາຈະຂ້ຽນຕີມ້າສ່ວນ ບຮາເຊັ້ນໂກ ມານຳຫມູ່ກໍພໍຟຽງແຕ່ເພື່ອມາແນມນຳມ້າບັກແດງດ້ວຍແສງຕາຫລົງໄຫລໃນໂຕມັນທໍ່ນັ້ນ. ເຂົາສະຫນັກເປັນຜູ້ຊ່ອຍກູດເອົາເອງ.

ຢູ່ໃນໂຮງກອນ ພວກເດັກນ້ອຍຮຸ່ນໃຫຍ່ຈຳນວນຫນ້ຳສິນລະວິນຢູ່ກັບເຄື່ອງຫວ່ານອັນເກົ່າ. ໂຊຟຽ ໂກໂລວັນ ຮ້ອງກ້ຳກ ໃສ່ພວກເຂົາ ແລະສ້າງຄວາມຈັບອົກຈັບໃຈໃຫ້ແກ່ພວກເຂົາດ້ວຍການສະແດງອອກເຖິງຄວາມຊຳນານໃນເລື່ອງສ້ອມແປງ ແລະຕີເຫລັກ.

ໂຊຟຽ ໂກໂລວັນ ມີລັກສະນະແຕກຕ່າງຈາກມະນຸດເຫລືອຕາຍອື່ນໆຢ່າງຈະແຈ້ງຢູ່ຫລາຍອັນ. ເຂົາເປັນຊາຍຫນຸ່ມຮ່າງມະຫຶມາ, ອອນຊອນຊື່ນຊົມຊີວິດ ແລະດື່ມເຫລົ້າເປັນປະຈຳແຕ່ບໍ່

ເມົາມາຍຈັກເທື່ອ. ເຂົາມີຄວາມເຫັນເປັນຂອງຕົນຕໍ່ທຸກຢ່າງ ແບບເສີຍເມີຍຈົນຫນ້າອັດສະຈັນ. ໃນກະໂຕເຂົາເອງ ໂກໂລວັນ ມີທັງລັກສະນະເປັນ ກູລັກ ແລະຊ່າງຕີເຫລັກ ປົນກັນຢູ່. ເຂົາເປັນ ເຈົ້າຂອງເຮືອນສອງຫລັງມີມ້າສາມໂຕ, ງົວແມ່ສອງໂຕ ແລະໂຮງ ຕີເຫລັກໂຮງຫນຶ່ງ. ກ້າບໍ່ເບິ່ງການດຳລົງຊີວິດແບບກູລັກຂອງເຂົາ ແລ້ວ ເຂົາກໍເປັນຊ່າງຕີເຫລັກຜູ້ມີຄວາມສາມາດຄົນຫນຶ່ງແລະມືທັງ ສອງຂອງເຂົານັ້ນ ກໍໃຫ້ວ່າຄ່ອງແຄ້ວວ່ອງໄວກ່ວາມັນສະຫມອງຊ້ຳ ອີກ. ໂຮງຕີເຫລັກຂອງເຂົາຕັ້ງຢູ່ແຄມກະຫນົນໄປ ຄາຄົບ ຂ້າງ ໂຮງແຮມນ້ອຍ, ຄວາມລັບໃນການສ້າງຮັ່ງຄູນມີຂອງຄອບຄົວ ໂກ ໂລວັນ ນອນຢູ່ໃນການທີ່ຕັ້ງທາງພູມສາດພິເສດອັນນີ້ແລ້ວ.

ໂຊຟຣີ ມາຍັງນິຄົມຕາມຄຳເຊື້ອເຊີນຂອງ ກາລິນາ ອີວາໂນ ວິດ. ຢູ່ໃນໂຮງກອງນຂອງພວກເຮົາມີເຄື່ອງມືຊ່າງຕີເຫລັກຈຳນວນ ຫນຶ່ງ, ກະໂຕໂຮງເຫລັກເອງແທ້ເພພັງໄປເຄິ່ງຫນຶ່ງແລ້ວ, ໂຊ ຟຣີງສະເຫນີຍ້າຍເອົາແທ່ນຫີນເຕົາໄຟ ຂອງເຂົາມາໄວ້ກັບພວກ ເຮົາພ້ອມດ້ວຍເຄື່ອງມືອື່ນໆອີກຈຳນວນຫນຶ່ງ ແລະໂຕເຂົາເອງ ກໍມາ ເຮັດວຽກຢູ່ກັບພວກເຮົາໃນຕຳແຫນ່ງຄູສອນ. ເຂົາຮັບເອົາຮອດຄ່າ ສ້ອມແປງອາຄານໂຮງຕີເຫລັກໄວ້ເປັນພາລະ. ທຳອິດຂ້າພະເຈົ້າບໍ່ ເຂົ້າໃຈວ່າເປັນຫຍັງເຂົາຈຶ່ງມີເຈດຕະນາດີແນວນີ້ຕໍ່ພວກເຮົາ.

ຄວາມສົງໄສຂອງຂ້າພະເຈົ້າເຫືອຫາຍໄປ ເມື່ອກາລິນາ ອີວາ ໂນວິດ ມາສະເຫນີ "ລາຍງານຕອນຄ່ຳ" ໃຫ້ຟັງ.

ທັງໆ ທີ່ຍັດເສດເຈ້ຍເຂົ້າໃນໂຄມແກ້ວຕະກຽງຂອງຂ້າພະເຈົ້າ ເພື່ອຕ້ານ ລາວເວົ້າວ່າ:

-ບໍ່ແມ່ນວ່າ ບັກພາກ ໂຊຟຣ໊ງ ຫັ້ນ ມັນຊິຍ້າຍມາຢູ່ນຳພວກເຮົາລ້ຳໆດອກເດ໊ີ. ພວກນູຊິກຊອນແຕ່ຊິແຫບມັນຢູ່ ຈັ່ງຊັ້ນມັນກໍເລີຍຢ້ານວ່າເຂົາຊິຍຶດເອົາໂຮງຕີເຫລັກມັນ, ສ່ວນວ່າການທີ່ມັນມາຢູ່ກັບພວກເຮົາ ຫັ້ນຫວະ! ຢ່າງຫນ້ອຍກໍໄດ້ຊື່ວ່າ ມາຮັບໃຊ້ອຳນາດໂຊວ໌ດເດ໊ີ.

-ແລ້ວເຮົາຊິເຮັດແນວໃດ໋ກັບມັນລະ? -ຂ້າພະເຈົ້າກາມກາ ລີນາ ອີວາໂນວິດ.

-ຊິເຮັດຫຍັງອີກ! ຊິມີຜູ້ໃດມາຢູ່ກັບພວກເຮົາອີກ? ພວກເຮົາຊິໄປຫາແທ່ນຕີເຫລັກມາແຕ່ທາງໃດ? ເອົາເຄື່ອງມືມາແຕ່ໃສ? ພວກເຮົາບໍ່ມີຮອດບ່ອນຊິໃຫ້ນາຍຄູນອນຊ້ຳນ່າ... ແມ່ນແຕ່ຊິສ້ອມແປງຕູບເປ່ເພຈັກຫລັງ ພວກເຮົາກໍຕ້ອງເອີ້ນຫາຊ່ຳງໄມ້. ແລ້ວແມ່ນຫຍັງກໍຕາມ, -ກາລີນາ ອີວາໂນວິດ ເວົ້າທັ໋ງຢູ່ຫົວຄ໊ິວເຂົ້າຫາກັນ, -ມັນຊິເປັນຫຍັງ ນ້ຳຫນ້າວ່າເປັນ ກູລັກຫັ້ນແມ່ນບໍ່? ມັນຊິເຮັດວ໋ກຄ໊ິຜູ້ອື່ນໆຫັ້ນລະ.

ກາລີນາ ອີວາໂນວິດ ພົ່ນຄ້ວນຈາກກອກຂຶ້ນໃສ່ເພດານດ້ວຍທ່າທີໃຊ້ຄວາມຄ໊ິດ, ຈາກນັ້ນບຶດໃຈລາວກໍຫົວອີກໆອອກມາ:

-ຈັ່ງໃດກໍຕາມ ພວກພາກນູຊິກຫັ້ນ ກະຊິຕ້ອງຍຶດເອົາໂຮງຕີເຫລັກຂອງມັນຢູ່ຫັ້ນລະ ແລ້ວແມ່ນໃຜຊິໄດ້ດີລະ? ພວກເຂົາຫັ້ນຫວະຊິໃຊ້ເປັນ ຈັ່ງຊັ້ນເອົາມາໄວ້ນຳພວກເຮົານະມັນດີແລ້ວ. ເຖິງຢ່າງໃດ ໂຊຟຣ໊ງ ກໍເຫມ໊ິດທາງໄປແລ້ວ, ມັນຍັງມີເວລາອີກບໍ່ດົນດອກ, ຈັກຫນ່ອຍພວກເຮົາກະເຊີນມັນໄປຕາມທາງຂອງມັນ. "ຢູ່ຫນ໊ີແມ່ນອົງການຈັດຕັ້ງໂຊວ໌ດເວ໊ີ" ພວກເຮົາຈະບອກມັນວ່າຈັ່ງຊ໊ີ

ແຫລະ, - "ເຮ້ຍ ນ້ຽງບັກຜີໂພງ ດູດເລືອດປະຊາຊົນ, ໄປຫນີບັກ ກູລັກ!..."

ພວກເຮົາໄດ້ຮັບເງິນຈຳນວນຫນຶ່ງເພື່ອສ້ອມແປງເຄຫາສະການ ແຕ່ ມັນຫນ້ອຍຫລາຍຈົນພວກເຮົາຕ້ອງອົດໃຈຈຳກັດຄວາມຄຶດຝັນ ອັນສວຍງາມໄວ້ຫນົດ. ພວກເຮົາຈຳຕ້ອງເຮັດທຸກຢ່າງເອົາເອງ ແລະພວກເຮົາກໍຕ້ອງການມີໂຮງຕີເຫລັກ ແລະໂຮງຊ່າງໄມ້. ພວກ ເຮົາມີຫ້ອງໄມ້ທີ່ພໍໃຊ້ວຽກໄດ້ຊະນິດດີແຕ່ບໍ່ດີແຕ່ຈຳນວນຫນຶ່ງ ແລະ ພວກເຮົາກໍຈັດຊື້ເຄື່ອງມື. ບໍ່ດົນຄູສອນວິຊາຊ່າງໄມ້ຄົນຫນຶ່ງກໍມາປາ ກົດຕົວຢູ່ໃນນິຄົມຂອງພວກເຮົາ. ດ້ວຍການຊີ້ນຳຂອງຄູຄົນນີ້, ພວກເດັກນ້ອຍພາກັນລົງມືເລື່ອຍໄມ້ແປ້ນ ທີ່ເອົາມາຈາກໃນເມືອງ ຢ່າງແຂງຂັນ ແລະເຂົ້າກອບຜາປະຕູປ່ອງຢ້ຽມເພື່ອເອົາໄປໃສ່ເຄຫະ ຢ່ານິຄົມໃຫມ່. ໂຊກບໍ່ດີປານໃດ, ຝີມືການຊ່າງຂອງພວກຊ່າງໄມ້ ຂອງພວກເຮົາຂີ້ເຮ ຕ່ຳຫລາຍຫລາຍຈົນວ່າຂະບວນການກະກຽມ ສ້າງສ່ວນປະກອບ ເພື່ອການດຳລົງຄົງຕົວໃນອະນາຄົດຂອງພວກເຮົາ ດຳເນີນໄປຢ່າງລຳບາກຍາກຊາ. ແລະໃນຕອນຕົ້ນ ວຽກງານໃນໂຮງ ຕີເຫລັກກໍມີບໍ່ອຶດບໍ່ຢາກ ແຕ່ມັນບໍ່ໃຫ້ຜົນຕາມຄວາມຕ້ອງການເລີຍ. ໂຊຟຣີນັ້ນ ບໍ່ສະແດງຄວາມທ້າທັນແບບພິເສດເພື່ອຢາກສຳເລັດ ວຽກງານພື້ນຟູເສດຖະກິດຢູ່ໃນລັດໂຊວຽດເລີຍ. ນອກນີ້ເງິນເດືອນ ທີ່ເຂົາໄດ້ຮັບໃນຖານະຄູສອນນັ້ນ ກໍເປັນຈຳນວນຫນ້ອຍຫລາຍ, ຈ່ຳຊ້ຳ ໃນມື້ເບີກເງິນເດືອນລາວຈ່ຳເອີ້ນໃຊ້ເດັກນ້ອຍຄົນຫນຶ່ງດ້ວຍ ສຽງດັງໆ ແບບເຈດຕະນາຢາກສະແດງພ້ອມທັງມອບເງິນເດືອນໃຫ້ ມັນຫມົດທຸກອັດ ເພື່ອໄປຊອກຊື້ເຫລົ້າເກື່ອນດ້ວຍຄຳສັ່ງວ່າ:

- ເຫລົ້າອີດກາຊັ້ນດີ ນີ ແກ້ວ.

ເປັນເວລາເຫົ່າເຕີບ ຂ້າພະເຈົ້າຈຳຮູ້ເລື່ອງນີ້, ເພາະວ່າເວລານັ້ນ ຂ້າພະເຈົ້າມີວຽກລະວຽນຢູ່ນຳແຕ່ບັນດາເຄື່ອງອຸປະກອນເລັ່ນ: ຂໍເຫລັກ, ບານພັບ, ນ້ຳສີ, ໄລປະຕູ... ພວກເດັກນ້ອຍທັ້ງຫມົດຕື່ນເຕັ້ນນຳວຽກງານທຳໆກັບຂ້າພະເຈົ້າ, ວຽກງານຂອງພວກເຮົາຂະຫຍາຍຕົວອອກຢ່າງໄວວາ! ເກີດມີຜູ້ເປັນຊ່າງຕີເຫລັກ, ຊ່າງໄມ້ຂຶ້ນຢູ່ໃນກຸ່ມເດັກນ້ອຍ ແລະບັດນີ້ພວກເຮົາວ່າ ພວກເຮົາພໍມີອັນຈະໃຊ້ຈ່າຍເລັກໆນ້ອຍໆເປັນຂອງຕົນເອງແລ້ວ.

ຄວາມມີຊີວິດຊີວາຢູ່ໃນໂຮງຊ່າງນັ້ນເອງ ເຮັດໃຫ້ພວກເຮົາພໍອົກພໍໃຈ. ພໍຮອດແປດໂມງ, ສຽງແຈ່ມໃສຈາກແທ່ນຕີເຫລັກກໍດັງກ້ອງຂຶ້ນທົ່ວນິຄົມ, ສຽງຫົວສຽງເວົ້າບໍ່ຈາງຫາຍຈາກໂຮງຊ່າງຈັກເຫື້ອ, ຢູ່ໃກ້ໆກັບປ່ອງປະຕູທີ່ໄຂກວ້າງຢູ່ນັ້ນ ນີຊາວບ້ານສອງສາມຄົນມາຢືນລົມກັນກ່ຽວຂ່າວຄາວກັບຢູ່ສະເຫມີ, ພວກຂະເຈົ້າສົນທະນາກັນເກີ່ງວຽກງານ, ການເກັບຜົນຜະລິດກະສິກຳ, ເວົ້າເກີ່ງແວກໂຄລາ ປະທານຄະນະກຳມະການຊາວນາທຸກ, ເວົ້າເກີ່ງຫຍ້າເຟືອງ ແລະຈັກເຄື່ອງຫວ່ານແນວປູກ. ພວກເຮົາເຮັດຕີນເຫັ ລັກໃຫ້ມ້າຂອງຊາວນາ, ແປງລໍ້ກວນແລະຫມາກສົບໄກ. ພວກເຮົາເກັບເງິນນຳຊາວນາທຸກແຕ່ເດົ່ງຄ່າ ແລະເລື່ອງນີ້ກໍກາຍເປັນຈຸດເລີ່ມຕົ້ນແຫ່ງການກີກກຽ ອັນບໍ່ສຸດບໍ່ສ້ຽ ເປັນກ່ຽວກັບຄວາມຍຸຕິທຳ ແລະຄວາມອະຍຸຕິທຳທາງສັງຄົມ.

ໂຊຟຣີ ສະເຫນີເຮັດກວນລໍ້ທຽມມ້າດ່ວນໃຫ້ພວກເຮົາ.

ໂຮງກອງນຂອງພວກເຮົາ ເຕັມໄປດ້ວຍເຄື່ອງເສດເຫລືອຮ້ອຍແປດ ພັນແນວ, ພວກເຮົາຊອກໄດ້ຮ່າງກອງນເຫລັ້ມຫນຶ່ງ. ກາລິນາ ອີວາໂນວິດ ໄດ້ເພົ່າກອງນຄູ່ຫນຶ່ງມາແຕ່ໃນເມືອງ. ພວກຊ່າງຕີ ເຫລັກຫຸ້ມໃສ່ມັນຢູ່ສອງມື້ເຕັມໆ, ບໍ່ຈັກສງ່ຄ້ອນຕີ, ສງ່ຄ້ອນຄູ່ ດ້ງອຶກຄະທຶກ, ໃນທີ່ສຸດ ໂຊຟຣິງກໍແຈ້ງໃຫ້ພວກເຮົາຮູ້ວ່າ ກອງນ ລໍ້ດ້ງກ່າວສໍາເລັດແລ້ວຍັງແຕ່ເຫລັກໄສ້ເສືອກັບລໍ້ເທົ່ານັ້ນ. ພວກ ເຮົາບໍ່ມີສິ່ງຂອງດ້ງກ່າວນີ້ເລີຍ. ຂ້າພະເຈົ້າເລາະລ່ອງຢູ່ໃນເມືອງຕັ້ງ ດິນ ເພື່ອຊອກຫາເຫລັກໄສ້ເສືອເກົ່າໆຈັກອັນ ແລະກາລິນາອີວາໂນ ວິດ ກໍອອກຄ່ວາໄປຕາມບ້ານນອກຂອກຄາເມຕັ້ງດິນ. ຜ່ານໄປອາ ທິດຫນຶ່ງເຕັມໆ ລາວຈຶ່ງກັບມາພ້ອມດ້ວຍກິ່ງລໍ້ລົດໃຫມ່ອ່ມສອງຄູ່; ສີຫນ້າຂອງລາວເຕັມໄປດ້ວຍຄວາມຮູ້ສຶກຕ່າງໆ ແຕ່ອັນທີ່ສໍາຄັນກ່ວາ ຫມູ່ແມ່ນ:

ອັນທີ່ຫມາຍຄວາມວ່າ:

- ພວກມູຊິກຫມູ່ນີ້ຈ່ງແມ່ນຊາດມັນຈ້າ!

ມື້ຫນຶ່ງ ໂຊຟຣິງ ກໍພາໂກເຊຍມານໍາ, ລາວຜູ້ນີ້ອາໄສຢູ່ໃນ ກຸງນາຫລ້ງຫນຶ່ງ, ເປັນຊາຍໄວ ຫ0 ປີ, ມັກຍິກມືໃຂວ່ເອິກເປັນ ສັນຍາລັກໃຫວ້ພະເຈົ້າຕະຫລອດເວລາ, ທ່າທາງຂອງລາວສຸພາບ ອ່ອນຫວານ, ຍາມໃດກໍຍິ້ມແຍ້ມເບີກບານຢູ່ສະເຫມີ. ລາວຫາ ກໍອອກມາແຕ່ໂຮງຫມໍຄົນບ້າ ແລະເກ່ງດ້ວນີ້ກໍສັ່ນເຊ້ນຂຶ້ນທົ່ວໆ ໂລດ ເມື່ອໄດ້ຍິນຊື່ຂອງຜູ້ເປັນເມຍເຊ່ິງເປັນຕົ້ນເຫດໃຫ້ຈິດຕະ ແພດບ້ຳມະຕິພະຍາດລາວຢ່ງຜິດໆ. ໂກເຊຍເປັນຊ່ງເຮັດກິ່ງ ກອງນໂດຍສະເພາະ. ລາວດີໃຈຈົນບອກບໍ່ຖືກ ເມື່ອພວກເຮົາຂໍຮ້ອງ

ໃຫ້ລາວເຮັດລໍ້ໃຫ້ຮອດ ๔ ອັນ. ຈຸດພິເສດຂອງຊີວິດຄູ່ຂອງລາວ ແລະທ່າອ່ຽງນິຍົມຊົມຊອບລັດທິອໍລະຫັນ ຢ່າງເປີດແປນຂອງລາວ ຊຸກດັນໃຫ້ລາວມາຍື່ນຂໍ້ສະເໜີ ເພື່ອຕົກລົງປະຕິບັດຕາມນັ້ນ ຂໍ້ຫນຶ່ງ ດັ່ງນີ້:

"ອ້າຍນ້ອງທັງຫລາຍເອີ້ຍ! ຂໍພະເປັນເຈົ້າອະໄພແກ່ຂ້າດ້ວຍ, ໃນເມື່ອວ່າພວກເຈົ້າໄປເອົາຂ້ອຍມາແລ້ວ, ຂ້ອຍເຊື່ອວ່າເກົ້າແກ່ ແລ້ວນີ້ນ່າ, ຟັງເດ໊ຂ້ອຍຊິວ່າແນວນີ້ລະ, ຂ້ອຍຊິຢູ່ກັບພວກເຈົ້າເລີຍ".

-ແຕ່ວ່າພວກເຮົາບໍ່ມີບ່ອນຊິໃຫ້ເຈົ້າຢູ່ດັ້ນເດ້.

-ບໍ່ເປັນຫຍັງ, ບໍ່ເປັນຫຍັງດອກອັນນັ້ນ, ພວກເຈົ້າບໍ່ຕ້ອງລຳບາກໃຈ. ຂ້ອຍຫາກຊິຫາເອົາເອງດອກ, ພະເປັນເຈົ້າຈະຊ່ອຍເບິ່ງແຍງດອກ! ຍາມຮ້ອນຈັ່ງຊີ້ຍ໋ງ່ວຍ, ສ່ວນສຳລັບຍາມຫນາວນັ້ນ ຈັ່ງຄ່ອຍວ່າກັນໃຫມ່. ຂ້ອຍນອນຢູ່ໃນໂຮງກອງນີ້ກໍໄດ້, ສະບາຍດີແລ້ວ.

-ເອົ້າ, ຈັ່ງຊັ້ນກໍຕົກລົງ.

ໂກເຊຍ ຍົກມືຈ້ຳໄຂ່ວກາໃສ່ເອິກ ແລ້ວກໍຫັນມາເວົ້າເລື່ອງອງກ ໃນທັນທີໂລດ.

-ກົງລໍ້ ຫັ້ນຫວະ, ພວກເຮົາຫາກຊິໄດ້ ມັນ ບໍ່ຍາກດອກ, ກາລິນາ ອີວາໂນວິດ ຫນິດຄວາມສາມາດແລ້ວ, ຂ້ອຍຮູ້ວ່າຈະເຮັດແນວໃດ, ພວກໝູຊຶກ ມັນຫາກຊິເອົາມາໃຫ້ພວກເຮົາເອງດອກ, ພວກເຈົ້າກ້າເບິ່ງໂລດພະເປັນເຈົ້າບໍ່ປ່ອຍໃຫ້ພວກເຮົາອິດຕາຍດອກ.

-ແຕ່ອາວໂກເຊຍເອີ້ຍ, ພວກເຮົາບໍ່ຕ້ອງການພັນອີກແລ້ວນ່າ ອັນກົງລໍ້ນັ້ນນະ.

-ວ່າແນວໃດເກາະ? "ບໍ່ຕ້ອງການອີກແລ້ວ" ຊັ້ນຫວະ? ພະເປັນເຈົ້າອະໄພໃຫ້ຂ້າດ້ວຍ. ສຳລັບພວກເຈົ້າອາດຊິບໍ່ຕ້ອງການແລ້ວ ແຕ່ລາວນາເດ້, ເຂົາຕ້ອງການຕ່ວ: ຄັນບໍ່ມີລໍ້ພວກເຂົາຊິເຮັດຫຍັງໄດ້ລະ? ພວກເຈົ້າຂາຍມັນເອົາເງິນມາໃຊ້ຈ່າຍສຳລັບເດັກນ້ອຍຊັ້ນຕ່ວ!

ກາລິນາ ອີວາໂນວິດ ຫົວຂໍ້ນອັກໆແລະສະຫນັບສະຫນູນຄວາມຄຶດເຫັນຂອງໂກເຊຍ:

-ໃຫ້ມັນຢູ່ຫນີ້ລະ ເວນສູ! ທຳມະຊາດເປັນແນວນີ້ລະ ສູຮູ້ບໍ, ທຸກສິ່ງທຸກຢ່າງຫາກເປັນໄປເອງ, ຄົນເຮົາແຕ່ລະຄົນກໍຫາກມີແນວຄິດຄົນລະຢ່າງ.

ໂກເຊຍກາຍເປັນທີ່ຮັກຫອມສຳລັບທຸກໆຄົນໃນບ້ານ.

ລາວພັກຢູ່ຫ້ອງນ້ອຍໆຫ້ອງຫນຶ່ງຂ້າງໆຫໍນອນ. ຢູ່ໃນສະຖານທີ່ນີ້ ນັບວ່າລາວປອດໄພຈາກການຮຸກຮານຂອງຄູ່ຊີວິດຜູ້ມີນິໄສໃຈຄໍຫຍາບຊ້າ ແລະບໍ່ຮູ້ຈັກຄວາມຢ່າງແນ່ນອນ. ພວກເດັກນ້ອຍຕ່າງກໍເຕັມໃຈປົກປ້ອງລາວຢ່າງຈິງໃຈຕ້ານກັບຮ່ອງຮອຍທ້ຳຫລາຍ ຈາກອະດີດຂອງລາວ. ເມຍຂອງໂກເຊຍມາຮ້ອງ ແລະປ້ອຍດ່າຢູ່ໃນບ້ານພວກເຮົາເລື້ອຍໆ. ລາວທ້ຽງກຮ້ອງໃຫ້ຜົວຂອງລາວກັບຄືນສູ່ຮັ້ງຮັກ ແລະທ້ຳຕູ່ຫາວ່າຂ້າພະເຈົ້າ, ເດັກນ້ອຍລະບອບປົກຄອງໂຊວຽດກັບບັກ "ໂຊຟຣ້ງ ພະເນຈອນ" ທ້ຳຫມິດນີ້ ທຳລາຍຄວາມສຸກໃນຄອບຄົວຂອງລາວ. ພວກເດັກນ້ອຍພະຍາຍາມເວົ້າໃຫ້ລາວເຂົ້າໃຈ ແບບສຸພາບ ແຕ່ຢ່າງເປີດເຜີຍວ່າ ໂກເຊຍນັ້ນບໍ່ແມ່ນຜົວທີ່

ເຫມາະສົມກັບລາວແລະວ່າ ການເຮັດລັ້ນີ້ແມ່ນວຽກງານຫນຶ່ງທີ່ສໍາ
ຄັນກ່ວາການສ້າງຄວາມສຸກໃນຊີວິດຄູ່. ຂະນະນັ້ນ, ຜູ້ກ່ຽວທີ່ວ່າ
ກໍຈະລົ້ນທົດໆຢູ່ໃນຫ້ອງນ້ອຍໆຂອງລາວ ທັງອົດທົນລໍຄອຍໃຫ້ການ
ບຸກຮຸກກິດໂຕ້ກັບໄປຢ່າງລົ້ນເຫຼືອ. ມີແຕ່ເມື່ອໃດສຽງຂອງພັນລະ
ຍານັກບຸກຮຸກຂອງລາວກອຍໄປດັງຢູ່ຟາກຫນອງເບ້ອງນັ້ນຟຸ້ນແລ້ວ,
ແລະນັ້ນຫມາຍຄວາມວ່າສຽງປ້ອຍດ່າ ບາງຄວາມລອຍມາເຖິງພວກ
ເຮົາເປັນບາງຕອນວ່າ: "ພວກລູກ... ຫມ..., ຜີຫ່າກືນຫົວສູ
ຫມົດແດ່ແມ້..." ເທົ່ານັ້ນ ໂກເຊຍ ຈຶ່ງໂປໂລອອກມາ:

- ຈັ່ງປອດໄພ! ພວກລູກເອີຍ! ເບິ່ງເອົາທ້ອນ ແມ່ຍິງຄົນນີ້ຈັ່ງ
ແມ່ນບໍ່ໄດ້ເລື່ອງອີຫລີ!

ເຖິງແມ່ນວ່າ ມີບັນຍາກາດບໍ່ແຈ່ມໃສເຖິງປານນີ້, ໂຮງຊ່າງ
ເຮັດລໍ້ຂອງພວກເຮົາກໍເລີ່ມໃຫ້ຫມາກໃຫ້ຜົນແລ້ວ. ເວົ້າກັນຕາມຊື່
ໂກເຊຍນັ້ນພຽງແຕ່ລາວຍົກມືຈໍ້າເອິກເທົ່ານັ້ນ ລາວກໍສາມາດເຮັດ
ວຽກຄ້າຂາຍຢ່າງມີຜົນງາມໂລດ, ມີຜູ້ຄົນເອົາກົ່ງລໍ້ມາໃຫ້ພວກເຮົາ
ໂດຍທີ່ພວກເຮົາບໍ່ໄດ້ອອກແຮງຈັກຫນ້ອຍ ແລະກໍທັງບໍ່ຮຽກຮ້ອງ
ໃຫ້ຈ່າຍເງິນສົດໆອີກ. ທັງນີ້ກໍຍ້ອນວ່າ ລາວເອງເປັນຊ່າງລໍ້ຜູ້ຍອດ
ຢ້ຽມແທ້ໆ ແລະຜົນງານຂອງລາວມີຊື່ສຽງໂດ່ງດັງກາຍຄຸ້ມເຂດພວກ
ເຮົາອອກໄປ.

ສະພາບຊີວິດຂອງພວກເຮົາສົມບູນ ແລະເບີກບານຂຶ້ນກ່ວາ
ເກົ່າ. ກາລິນາ ອິວາໂນວິດ ສາມາດຫວ່ານເຂົ້າອ່ອນໄດ້ເກືອບ
ຫ ເດເຊຍຕິນ, ມ້າບັກແດງກາຍເປັນສິ່ງປະດັບໂຮງມ້າ ແລະຢູ່ໃນ

ເດີ່ນພວກເຮົາກໍມີກອງນທຽມມ້າດ່ວຈອດຢູ່, ຈຸດອ່ອນອັນດຽວ ຂອງມັນກໍແມ່ນວ່າມັນຢາກອ່າວສູງໂພດແດ່ຄື ມັນສູງເຫນືອຫນ້າ ດິນຮອດສອງແມັດ, ເຮັດໃຫ້ຜູ້ໂດຍສານເຊິ່ງນັ່ງຢູ່ໃນກະບະຂອງມັນ ຮູ້ສຶກຄືກັບວ່າ ມ້າທີ່ແກ່ກອງນຢູ່ນັ້ນຢູ່ກ້ອງກອງນພຸ້ນ, ທັງໆທີ່ວ່າ ມັນຢູ່ດ້ານຫນ້າຂອງກອງນແທ້ໆ.

ກິດຈະກຳຂອງພວກເຮົາຂະຫຍາຍຕົວອອກຢ່າງໄວວາ ຈົນພວກ ເຮົາຮູ້ສຶກວ່າຂາດແຮງງານໄປ. ຈຳເປັນຕ້ອງພ້າວສ້ອມແປງຫໍພັກ ບ່ອນນອນອີກບ່ອນໃຫມ່ຕື່ມ, ແລະບໍ່ດົນ, ຜູ້ຕື່ມກຳລັງກໍມາເຖິງ, ນັບວ່າແມ່ນປະເພດຫນຶ່ງ ຊຶ່ງບໍ່ຄືໃຜ ແລະບໍ່ມີໃຜຄືມາກ່ອນເລີຍ.

ໃນສະໄຫມກຳລັງມີການກວດລ້າງພວກອັດຕາມັນ* ກັບພວກ "ເຈົ້າພໍ່" ທັງຫລາຍ, ຈັ່ງຊັ້ນພັກພວກເພື່ອນຮ່ວມສູ້ຮົບຮຸ່ນນ້ອຍ ຂອງຄົນປະເພດເລັບເຊັ້ນໂກ**, ປະເພດ "ເຈົ້າແມ່ນາຮຸດເຊຍ" ແລະອື່ນໆ ເຊິ່ງບົດບາດໃນກອງທັບຫລືກອງໂຈນ ນັ້ນບໍ່ກາຍກາບະ ຄົນລ້ຽງມ້າ ຫລືຄົນຄົວກິນ ຈົ່ງກົກສົ່ງມາຍັງນິຄົມຂອງພວກເຮົາ. ແມ່ນຍ້ອນສະພາບອັນເປັນປະຫວັດສາດການຕອນນີ້ເອງ ຈົ່ງເກີດມີ ຊື່ ການາບານີບ, ປຣີໂກດໂກ, ໂກໂວສ, ໂຊໂຣກາ, ແວກຊະ ເນັບ, ມີເຕຍກິນແລະອື່ນໆປາກົດຂຶ້ນຢູ່ໃນນິຄົມພວກເຮົາ.

---

* ອັດຕາມັນ ຊື່ເອີ້ນ ຫົວຫນ້າພວກອັນທະພານ.

** ເລັບເຊັ້ນໂກ ແລະເຈົ້າແມ່ ນາຮຸດເຊຍ ຊື່ເອີ້ນພວກຫົວ ຫນ້າກຸ່ມອັນທະພານໃນສະໄຫມນັ້ນ.

ບົດທີ ๒

ນິໄສໃຈຄໍ ແລະ ອັດທະນະທຳ

ການມີສະມາຊິກໃຫມ່ ເຂົ້າມາຢູ່ນິຄົມຕົ້ນກະທົບເຖິງແນວຄິດ ໂຮມຫມູ່ເຊິ່ງຫາກໍຕັ້ງຕົວຂຶ້ນຢ່າງຮຸນແຮງ, ແລະພວກເຮົາໄດ້ກອຍ ກັບໄປຫາແຫລ່ງເກົ່າຄືນອີກເທື່ອຫນຶ່ງ.

ພວກນັກຮຽນຮຸ່ນທຳອິດຂອງພວກເຮົາ ເຫັນຄວາມຈຳເປັນອັນ ປະກົມປະການແລ້ວ ໃນການທີ່ຈະຕ້ອງຍອມຮັບນັບຖືກົດລະບຽບ, ແຕ່ພວກມາໃຫມ່ນັ້ນລ້ວນແຕ່ປະເພດລູກສິດລັດທິອະນາທິປະໄຕ ທັງ ນັ້ນ, ພວກເຂົາບໍ່ຮູ້ຈັກກັບຄຳວ່າລະບຽບເລີຍ ແລະບໍ່ມີທ່າທີວ່າຈະ ຍິນຍອມຮັບຮູ້ຄຳສັ່ງໃດໆ. ເຖິງຢ່າງໃດກໍຕາມ ຍັງສາມາດເວົ້າໄດ້ວ່າ ພວກເຮົາບໍ່ເຄີຍເຫັນການຕ້ານທານແບບເປີດແປນຫລືທ່າທີແບບ ອັນທະພານ ສະແດງຕໍ່ຄູສອນເກີດຂຶ້ນອີກເປັນຄັ້ງທີສອງຢູ່ໃນນິຄົມ. ອາດຄຶດເອົາເອງໄດ້ວ່າ ຊາໂດຣອບ, ບູຮູນ, ດາຣາແນດ ແລະຜູ້ ອື່ນໆ ໄດ້ເລົ່າເຖິງສະພາບຊີວິດໃນຊຸມນຸ້ມທຳອິດຢູ່ໃນນິຄົມກ້ອກກີ ແບບສັ້ນໆສູ່ພວກມາໃຫມ່ຟັງແລ້ວ ແລະພວກນີ້ກໍຄືກັບພວກນັກຮຽນ ເກົ່ານັ້ນແລ້ວ ພາກັນສະແດງຄວາມເຊື່ອຫມັ້ນສະເຫມີມາວ່າ ພວກ ຄູສອນບໍ່ແມ່ນກຳລັງທີ່ເປັນປໍລະປັກກັບພວກເຂົາເລີຍ. ເຫດຜົນ ຕົ້ນຕໍຂອງການຕີລາຄາສະພາບເຊັ່ນນີ້ ແມ່ນຂຶ້ນຢູ່ກັບການເຮັດວຽກ ອັນຫນັກຫນ່ວງ ທີ່ຄູພວກເຮົາພາກັນປະຕິບັດດ້ວຍຄວາມເສຍສະ ຫລະນັ້ນເອງ ທີ່ຮຽກຮ້ອງໃຫ້ມີການເຄົາລົບນັບຖືກັນຢ່າງທຳມະດາ. ຍ້ອນແນວນີ້ເອງເດັກນ້ອຍນິຄົມສ່ວນຫລວງຫລາຍຍົກເວັ້ນບາງກໍລະ

ນີແທ້ໆເທົ່ານັ້ນ ຈຶ່ງມີການພົວພັນທີ່ດີງາມກັບພວກເຮົາ; ພວກເຂົາ ຮັບຮູ້ຄວາມຈຳເປັນໃນການເຮັດວຽກແລະ ຮຽນຫນັງສື ແລະເຂົ້າ ໃຈດີວ່າທັງຫມົດນີ້ແມ່ນເພື່ອຜົນປະໂຫຍດສ່ວນໂຮມຂອງພວກເຮົາ ເອງ. ຄວາມກົງດ້ານແລະການບໍ່ຍອມຮັບສະພາບຂາດເຂີນ ສະ ແດງຕົວອອກພາຍໃຕ້ຮູບການຊົ່ວຂະນາດນ້ອຍຕ້ອຍ ແລະບໍ່ແມ່ນການ ປະທ້ວງຈັກເທື່ອ.

ພວກເຮົາເຂົ້າໃຈເອົາເອງວ່າ ສະຖານະການອັນຫນ້າຍິນດີອັນ ນີ້ເປັນພຽງຮູບການພາຍນອກຢ່າງຫນຶ່ງຂອງລະບຽບວິໃນ ແລະນັ້ນ ມັນບໍ່ແມ່ນການກ້າວເຂົ້າສູ່ລະດັບວັດທະນະທຳ ອັນປະກົມປະການ ຢ່າງຫນຶ່ງເລີຍ.

ບັນຫາຂອງມັນມີຢູ່ວ່າເປັນຫຍັງພວກເດັກນ້ອຍ ຈຶ່ງຍັງດຳລົງ ຊີວິດຢູ່ຕໍ່ໄປພາຍໃນນິຄົມຂອງພວກເຮົາ ທັງໆທີ່ວ່າ ພວກເຮົາທຸກ ຍາກຂາດເຂີນທຸກຢ່າງ ແລະວຽກງານກໍຫນັກຫນ່ວງສົມຄວນ, ເປັນ ຫຍັງພວກເຂົາຈຶ່ງບໍ່ລັກຫນີ, ແນ່ນອນແລ້ວວ່າບັນຫານີ້ບໍ່ກ່ຽວພັນ ກັບສຶກສາສາດແຕ່ຢ່າງດຽວ, ໃນປີ ໑໙໔໑, ການມີຊີວິດພະເນ ຈອນຢູ່ຕາມທ້ອງຖະຫນົນບໍ່ແມ່ນເລື່ອງຫນ້າອຶດສາເສຍແລ້ວ. ເຖິງ ແມ່ນວ່າ ເຂດຂອງພວກເຮົາບໍ່ມີຊື່ຢູ່ໃນບັນຊີເຂດປະສົບໄພອຶດຫີວ ກໍຕາມ ແຕ່ເງື່ອນໄຂການດຳລົງຊີວິດຢູ່ໃນເມືອງ ກໍຫາກອັດຕະຄັດ ຫນັກຫນ່ວງສົມຄວນ ທັງມີຄົນອຶດຫີວຫລາຍຄົນ. ນອກນີ້ໃນ ລຸມປີທຳອິດນັ້ນ ພວກເຮົາບໍ່ໄດ້ຮັບເອົາເດັກໄຮ້ຍາດທີ່ລຸ້ນເຄີຍກັບ ການພະເນຈອນໃນທ້ອງຖະຫນົນເລີຍ ນັກຮຽນສ່ວນຫລວງຫລາຍ

ມີຄອບຄົວມີພໍ່ແມ່ ແຕ່ໄດ້ຫ່າງເຫີນຕັດຂາດຈາກກັນຫລ່ານບໍ່ດົນມານີ້ເອງ.

ໃນຂະນະດຽວກັນ ສະມາຊິກນິຄົມຂອງພວກເຮົາມີຈຸດເດັ່ນທາງດ້ານນິໄສແລະລະດັບການສຶກສາອັນຕ່ຳຕ້ອຍ. ເວົ້າແທ້ແລ້ວ ກໍຫາກແມ່ນນັກຮຽນປະເພດປະຈຳແບບນີ້ແລ້ວ ທີ່ພວກເພິ່ນຢາກສົ່ງໄປຢູ່ນິຄົມພິເສດຂອງພວກເຮົາ ທີ່ຕັ້ງໄວ້ສະເພາະສຶກສາອົບຮົມພວກດັດຍາກ. ພວກເຂົາສ່ວນຫລາຍກຶກຫນ້ງສື ຜູ້ໃດກໍມີເຫົ່າ ແລະລ້ຳເຄີຍກັບຄວາມເປ່ເປື້ອນ ແລະສ່ວນທີ່ກ່ຽວກັບການພົວພັນກັບຄົນອື່ນນັ້ນ ຍາມໃດພວກເຂົາກໍກຽມພ້ອມຢູ່ໃນທ່າປ້ອງກັນຕົວ ດ້ວຍວິທີຂີ້ຮຸ່ຕາມແບບພະເອກຍຸກເກົ່າ.

ບາງຄົນທີ່ມີລະດັບການສຶກສາດີກ່ວາ ຄ່ອຍໆແຍກຕົວອອກຈາກກຸ່ມຄົນພວກນີ້ເຊັ່ນ: ຊາໂດຣອບ, ບູຈູນ, ເວດກອບສະກີ, ບຣາເຊັນໂກ. ສ່ວນພວກມາໃຫມ່ກໍມີຄື ກາຣາບານີບ ມີເຕຍກິນ, ສ່ວນເຫລືອນັ້ນ ຄ່ອຍໆພາກັນກ້າວຂຶ້ນໄປສຳຜັດກັບວັດທະນະທຳແຫ່ງມະນຸດຊາດຢ່າງລຳບາກ ແລະຊັກຊ້າເປັນພິເສດ, ສະເພາະແລ້ວຍິ່ງພວກເຮົາທຸກຍາກເທົ່າໃດ, ຫິວໂຫຍເທົ່າໃດ ມັນກໍຍິ່ງຊັກຊ້າຂຶ້ນເທົ່ານັ້ນ.

ໃນປີທຳອິດ ສິ່ງທີ່ພວກເຮົາເຫັນວ່າກັນດານກ່ວາຫມູ່ກໍແມ່ນຄວາມກະຫາຍໃນການຜິດຫງ໋ວາດກັນເອງ, ສາຍພົວພັນໃນຫມູ່ເຊົ່າເປາະຜ່ອຍຢູ່ແລ້ວ ຊອມແຕ່ຈະຂາດສະບັ້ນໄປ ຍ້ອນສາເຫດຕ່າງໆ. ສິ່ງດັ່ງກ່າວນີ້ສ່ວນຫລວງຫລາຍແລ້ວ ບໍ່ແມ່ນເປັນຍ້ອນຄວາມຮູ້ສຶກເປັນປໍລະປັກກັນໃນລະຫວ່າງພວກເຂົາເອງດອກ ແຕ່

ເປັນຍ້ອນທ່າທາງ ວ່າງໂຕເປັນພະເອກ ຟຸ້ນຫລາຍກ່ວາ, ແລະກໍບໍ່ມີ ສັນຊາດຕະຍານທາງການເມືອງຊະນິດໃດ ດັດແປງການກະທຳອັນນີ້ ໄດ້. ເຖິງແມ່ນວ່າພວກເຂົາຫລາຍຄົນຕົກຢູ່ໃນຄ້າຍກົງກັນຂ້າມ ແຕ່ພວກເຂົາກໍຫາກບໍ່ມີຄວາມຮູ້ສຶກວ່າຕົນສັງກັດຢູ່ໃນຊົນຊັ້ນໃດຊົນ ຊັ້ນຫນຶ່ງເລີຍ. ເວົ້າໄດ້ວ່າເກືອບບໍ່ມີລູກກຳມະກອນຈັກຄົນປົນຢູ່ໃນ ຫມູ່ພວກເຂົາ ແລະຄຳວ່າຊາວກຳມາຊີບນັ້ນກໍຍັງເປັນຄຳສັບໃຫມ່ ຫ່າງໄກຈາກພວກເຂົາຫລາຍ, ພວກເຂົາສ່ວນຫລວງຫລາຍເບິ່ງ ວຽກງານການທຳນາຢ່າງຫມິ່ນປະຫມາດ ແລະຄວາມຮູ້ສຶກອັນນີ້ບໍ່ ໄດ້ເກີດມາຈາກວຽກງານອັນນີ້ເທົ່ານັ້ນ ແຕ່ສ່ວນໃຫຍ່ແມ່ນເກີດມາ ຈາກສະພາບຊີວິດອັນຫລ້າຫລັງຂອງຊາວນາ ແລະຈິດຕະສາດຂອງ ຊາວນານຳ. ຈົ່ງຊົ່ນສະຫນາມແຫ່ງການລະເມີດລະບຽບວິໄນ, ແຫ່ງການສະແດງບຸກຄະລະພາບແບບປ່າເຖື່ອນໄຮ້ອະລິຍະທຳ ຍ້ອນ ວິນຍານອັນໂດດດ່ຽວປ່ຽວພອຍຂອງເຂົາ ຈົ່ງຍັງຄົງໄຂກ້ວ່າງອອກຕໍ່ ຫນ້າພວກເຂົາຢູ່.

ເບິ່ງທົ່ວໄປແລ້ວ ກໍເປັນຮູບພາບທີ່ຫນ້າເສົ້າສົມຄວນ ແຕ່ໃນ ເວລາດຽວກັນ ຫນໍ່ແຫນງແຫ່ງຈິດໃຈໂຮມຫມູ່ໄດ້ກໍ່ເກີດຂຶ້ນ ເມື່ອ ລະດູຫນາວທຳອິດນັ້ນເອງ, ມັນປ່ຽນອາຍຸຂອງມັນຂຶ້ນຄ່ອຍໆພາຍ ໃນປະຊາຄົມຂອງພວກເຮົາ ແລະຫນໍ່ແຫນງດັ່ງກ່າວກໍເປັນທີ່ຫວງ ແຫນສົມຄວນປົກປັກຮັກສາໄວ້ສຸດຫົວໃຈ, ບໍ່ຄວນປ່ອຍໃຫ້ສິ່ງອື່ນ ໃດຍາມຂຶ້ນກ້ວ່ານເຕັ້ງຫນໍ່ແຫນງອັນປະເສີດເຫລົ່ານີ້. ຂ້າພະ ເຈົ້າກໍ່ວ່າແມ່ນຜົນບຸນຢ່າງຫນຶ່ງຂອງຕົນ ທີ່ໄດ້ສັງເກດເຫັນສະພາບ ການທີ່ສຸດແສນສຳຄັນໃນຄັ້ງນີ້ ທັງໄດ້ຕີລາຄາມັນຢ່າງຖືກຕ້ອງ. ປົກ

ປ້ອງຫນໍ່ອ່ອນເຫລົ່ານີ້ ຊ່າງເປັນພາລະທີ່ຫນັກຫນ່ວງເກີນວິໄສທ້າ ຍຶດຍາວທໍລະມານຈົນຫນ້າເຫລືອເຊື່ອ ຈົນຂ້າພະເຈົ້າຄຶດວ່າກ້າ ຫາກແມ່ນຂ້າພະເຈົ້າຮູ້ໄວ້ກ່ອນລ່ວງຫນ້າວ່າ ມັນຈະເປັນດັ່ງນີ້ຂ້າພະ ເຈົ້າຄົງກອຍຫລັງບໍ່ຍອມຕໍ່ສູ້ເລີຍ. ເປັນແຕ່ບຸນ, ຂ້າພະເຈົ້ານັ້ນ ຍາມໃດກໍຮູ້ສຶກແຕ່ວ່າຕົນກໍາລັງຢູ່ຕໍ່ຫນ້າໄຊຊະນະເອົາໂລດ, ຂ້າພະ ເຈົ້າຕັ້ງວ່າເປັນນັກສຸຂະທັດນິຍົມຜູ້ດື້ດ້ານແທ້ໆ.

ໃນແຕ່ລະມື້ ຊີວິດຂອງຂ້າພະເຈົ້າເຕັມໄປດ້ວຍຄວາມມ່ວນຊື່ນ ຄວາມສັດທາ ແລະຄວາມຜິດຫວັງສັບປົນກັນໄປຫມົດ.

ເບິ່ງຄືວ່າທຸກສິ່ງທຸກຢ່າງດໍາເນີນໄປຢ່າງດີ. ພວກຄູສອນສໍາ ເລັດວຽກປະຈໍາວັນຂອງພວກເຂົາ, ຫລັງຈາກນັ້ນກໍອ່ານຫນັງສື ເລັກນ້ອຍຫລືບໍ່ກໍໂອ້ລົມກັນຫລິ້ນເປັນການຂ້າເວລາ, ຢອກຫລິ້ນ ກັບພວກນັກຮຽນ ຫລັງຈາກນັ້ນ ກໍກ່າວຄໍາອໍາລາແຍກຍ້າຍກັນເຂົ້ານອນບ່ອນໃຜບ່ອນມັນ. ພວກເດັກນ້ອຍຢູ່ໃນອາລົມສະຫງົບດີ ແລະກຽມຕົວເຂົ້າບ່ອນນອນ. ຢູ່ໃນຫ້ອງຂອງຂ້າພະເຈົ້ານັ້ນ ອາ ການກະຖຸກເຕັ້ນ ເທື່ອສຸດທ້າຍຂອງວຽງການປະຈໍາວັນກໍາລັງອ່ອນ ແອລົງ, ການິນາ ອີວານໂນວິດ ນັ່ງຢູ່ເທິງຕັ່ງອີ້ຕົວຫນຶ່ງທ້າພົ່ນຄໍາ ເທດສະນາອອກມາຄື ຕາມປົກກະຕິຂອງລາວ, ນັກຮຽນສະຫລອກ ກອກຄົນຫນຶ່ງຍັງບໍ່ຍອມໄປນອນ, ບຣາເຊັນໂກ ກັບ ກູດ ຢືນຢູ່ ຂ້າງປະຕູລໍຄອຍໂອກາດອັນສົມຄວນທີ່ຈະໂຈມຕີ ການິນາ ອີວານໂນ ວິດ ກ່ອນກັບເລື່ອງຫຍ້າແຫ້ງ ແລະແລ້ວໃນທັນໃດນັ້ນ ກໍມີສຽງ ແລ່ນ ແລະສຽງຮ້ອງດັງຜ່ານອາກາດເຂົ້າມາວ່າ:

- ເຂົາຂ້າກັນຢູ່ຫໍພັກ!

ຂ້າພະເຈົ້າໂດດອອກມາຈາກຫ້ອງໃນທັນທີ. ສຽງເອີ້ນສຽງຮ້ອງ ໃສ່ກັນດັງຄັບຫໍພັກ. ຢູ່ແຈຫນຶ່ງເດັກນ້ອຍສອງກຸ່ມກໍາລັງຂຶ້ງຫນ້າ, ແອບເອິກເຂົ້າໃສ່ກັນ ແລກກໍາປັ້ນກັນ ທັ້ງຮ້ອງດ່າກັນສະຫລັບໄປ ນໍາ. ມີຫມໍຫນຶ່ງຟາດຖືກກົກຫູຫມໍຫນຶ່ງ, ບູຮຸນ ຖືມີດແຫລມ ພົ້ນແລ່ນອອກຈາກມືພະເອກຜູ້ຫນຶ່ງໃນກຸ່ມນັ້ ຈັ່ງຊັ້ນຈຶ່ງມີຄົນຮ້ອງ ມາໃສ່ນັນຈາກແຈຫນຶ່ງວ່າ:

- ແມ່ນມຶງມາສິນຫຍັງ? ຫລືຢາກໄດ້ຊຶ່ກູສັກໃສ່ຫນ້າມຶງ?

ຢູ່ອ້ອມຕຽງຫນ່ວຍຫນຶ່ງ ກຸ່ມຂາສະຫນັບສະຫນູນຈໍານວນ ຫນຶ່ງຫຸ້ມລ້ອມຜູ້ໄດ້ຮັບບາດເຈັບຄົນຫນຶ່ງ ເຊິ່ງດຶງເອົາຜ້າປູບ່ອນມາ ພັນມືພັນບາດເອົາເອງຢູ່ນິດໆ.

ຂ້າພະເຈົ້າບໍ່ເຄີຍເຂົ້າໄປແຍກຄູ່ຕໍ່ສູ້ໃດໆ ອອກຈາກກັນຈັກເທື່ອ ທັ້ງບໍ່ພະຍາຍາມຮ້ອງສຽງແຮງເທົ່າພວກເຂົາ.

ກາລິນາ ອີວາໂນວິດ ຈົ່ມພຸມໆຢູ່ທາງຫລັງຂ້າພະເຈົ້າ, ລາວ ສັ່ນທິດໆດ້ວຍຄວາມຢ້ານ:

- ໂອ່... ໄວແດ່ໄວແດ່ ພວກມັນຊິຂ້າກັນຕາຍຫມົດແລ້ວ ໂອ້ຍ ພວກຜາກເອີ້ຍ!

ແຕ່ ຂ້າພະເຈົ້າຢືນເສີຍ ຢູ່ປາກປະຕູພີ ທັ້ງບໍ່ປາກເວົ້າຫຍັງ ຫມົດ, ຂ້າພະເຈົ້າເບິ່ງພວກເຂົາຊຶ່ງ. ຄາວຫນຶ່ງກໍມີຜູ້ສັງເກດເຫັນ ຂ້າພະເຈົ້າ ພວກເຂົາຄ້ອກບອກກັນແລ້ວຄ່ອຍງຽບນິດລົງ. ບໍ່ດົນ ຄວາມງຽບສະຫງັດຢ່າງຫນຶ່ງກໍບັງເກີດຂຶ້ນຢ່າງໄວວາ ມັນບຸກຮຸກ ໂຈມຕີຈິດໃຈຂອງພວກທີ່ຕໍ່ສູ້ດ້ານຫົວແຂງໄດ້ຄືກັນ. ບາງຄົນຟ້າວ ເຊື່ອງມີດປາຍແຫລມຄືນ, ກໍາປັ້ນຫລຸດຕໍ່າລົງ ແລະຄໍ່ຍ້ອຍດ່າ

ຫຍາບຊ້າລາມິກຄ່ອຍມິດງນລົງ ແຕ່ຂ້າພະເຈົ້າຍັງຄົງປາກບໍ່ອອກ, ຄວາມຮູ້ສຶກໂກດແຄ້ນແຫນ້ນໃຈແລະຄວາມກຽດຊັງຢ່າງຫນຶ່ງຕໍ່ໂລກປ່າເຖື່ອນອ້ອມຂ້າງກໍາລັງພິດຮ້ອນຢູ່ໃນເລືອດຂ້າພະເຈົ້າ. ມັນແມ່ນຄວາມກຽດຊັງຊະນິດໄຮ້ພະລັງ ເພາະຂ້າພະເຈົ້າເອງຮູ້ດີທີ່ສຸດວ່າ ສິ່ງທີ່ເກີດຂຶ້ນໃນວັນນີ້ຍັງຈະເກີດຂຶ້ນອີກໃນວັນຕໍ່ໄປ.

ໃນທີ່ສຸດ ຄວາມງນສະຫງັດອັນຫນ້າເກງກົວຢ່າງຫນຶ່ງກໍເຂົ້າຄອບງໍາໄປທົ່ວຫໍພັກ; ສຽງຫັນໃຈແຮງໆຫນັກໆກໍຄ່ອຍໆຜ່ອນຜັນລົງ.

ແລະແລ້ວຂ້າພະເຈົ້າກໍເປັນຝ່າຍລະເບີດຄວາມໂມໂຫໂທໂສະນິດຮຸນແຮງທີ່ສຸດອອກມາ ພ້ອມໆດຽວກັນນັ້ນ ຂ້າພະເຈົ້າກໍເຊື່ອຫມັ້ນວ່າ ຈໍາເປັນຕ້ອງເຮັດແນວນີ້ແລ້ວ:

-ທຸກຄົນເອົາມິດປະໄວ້ໂຕະ ດຽວນີ້! ໄວ!

ພວກເຂົາຈົກມິດອອກມາວາງໄວ້ເທິງຫນ້າໂຕະ: ມີທັງມິດແຫລມພົນແລນ, ມິດຄ້ອກົນທີ່ລັກອອກມາຈາກເຮືອນຄ້ວ ໂດຍສະເພາະ ເພື່ອມາສັ່ງສອນກັນ, ມີທັງມິດບາງ ແລະມິດໂກນທີ່ພວກເຂົາເຮັດຂຶ້ນເອົາເອງຢູ່ໃນໂຮງຊ່າງຕີເຫລັກ. ຄວາມມິດຍັງຄົງຄອບງໍາໄປທົ່ວຫໍພັກ. ຊາໂດຣອບ ຢືນຢູ່ແປະໂຕະແລະຍິ້ມ, ເວລານັ້ນ ມັນເປັນຕາຮັກແທ້ໆ ແລະຂ້າພະເຈົ້າກໍຮູ້ສຶກວ່າມັນແມ່ນບຸກຄົນຜູ້ຫນຶ່ງຜູ້ດຽວ ທີ່ຂ້າພະເຈົ້າຖືເອົາເປັນເພື່ອນຮັກເພື່ອນແພງໄດ້. ຂ້າພະເຈົ້າຖາມຕໍ່ອີກຄັ້ນໆວ່າ:

-ສະຫນັບມືດ້?

- ຂ້ອຍມີຢູ່ອັນຫນຶ່ງ ດຶງອອກມາຈາກພວກເຂົານັ້ນລະ, - ຊາໂດຣອບບອກ.

ພວກເຂົາພາກັນຍືນຄໍເຕື່ອຍເຕະເຊະ.

- ຂຶ້ນຕຽງນອນ!

ຂ້າພະເຈົ້າບໍ່ຫນີອອກຈາກຫໍພັກ ຕາບໃດທີ່ພວກເຂົາບໍ່ພາກັນຂຶ້ນຕຽງນອນ.

ຕື່ນເຊົ້າມາ ພວກເດັກນ້ອຍພາກັນຫລີກເວັ້ນບໍ່ເວົ້າເຫດການເລື່ອງຜີດຫຽງໃນຄືນຜ່ານມານັ້ນເລີຍ ແລະຂ້າພະເຈົ້າເອງກໍບໍ່ເວົ້າຮອດມັນອີກພໍຄວາມ.

ເດືອນຫນຶ່ງຫລືສອງເດືອນຜ່ານໄປ, ໄລຍະນັ້ນເກີດມີແຫລ່ງບໍລະບັກຢູ່ທຸກຈອກແຈຢ່າງລັບໆແຕ່ທຸກຄັ້ງທີ່ແຫລ່ງດັ່ງກ່າວຮຸ່ນຮ້ອນກຽມຈະລຸກໄຫມ້ຂຶ້ນມັນກໍຖືກມຸດນອດລົງຍ້ອນຫມົດກຸ່ນເອງ. ແຕ່ບໍ່ດົນລະເບີດລູກໃຫມ່ກໍແຕກຂຶ້ນ, ອີກຄັ້ງຫນຶ່ງ ພວກເດັກນ້ອຍສູນເສຍພາບພິດຄວາມເປັນມະນຸດຂອງພວກເຂົາໄປຫມົດ, ພວກເຂົາໄລ່ເອົາມີດແທງກັນເປັນຈຸ່ນໆ.

ແລ້ງຫນຶ່ງ, ຂ້າພະເຈົ້າເຂົ້າໃຈວ່າເຖິງເວລາຄວນຕອກຫລົ້ມໃຫ້ແຫ້ນຄືເພິ່ນວ່ານັ້ນເສຍແລ້ວ. ຫລັງຈາກມີການຕໍ່ສູ້ກັນພັກຫນຶ່ງແລ້ວ ຂ້າພະເຈົ້າໄດ້ສັ່ງໃຫ້ ໂຊບິດ ນັກຫລົ້ນມີດຜູ້ເລືອດຮ້ອນທີ່ສຸດຜູ້ຫນຶ່ງມາຫາຢູ່ຫ້ອງ ແລະມັນກໍຍອມມາຢ່າງດີໆ. ເມື່ອມັນເຂົ້າມາໃນຫ້ອງຮຽບຮ້ອຍແລ້ວຂ້າພະເຈົ້າບອກມັນວ່າ:

- ພຶ້ງຕ້ອງອອກຈາກນິຄົມແລ້ວລະ.

- ແລ້ວຊິໃຫ້ຂ້ອຍໄປຢູ່ໃສ?

- ຂໍແນະນຳໃຫ້ນ້ຳໄປຢູ່ບ່ອນໃດບ່ອນຫນຶ່ງ ທີ່ເຂົາອະນຸຍາດໃຫ້ເອົາມືດແທ່ງກັນຫລົ້ນ. ຍ້ອນວ່ານົ້ກ້ົຫມູ່ນ້ຳຜູ້ຫນຶ່ງບໍ່ຍອມສະຫລະບ່ອນນັ່ງໃຫ້ນ້ຳຢູ່ໂຕະກິນເຂົ້າ ນ້ຳກໍເລີຍເອົາມືດຂູ່ນັ້ນ. ຈັ່ງຊັ້ນກູເຊີນນ້ຳໄປຫາບ່ອນໃດທີ່ເຂົາໃຊ້ມືດສັ່ງສອນກັນພຸ້ນ:

- ຊິໃຫ້ຂ້ອຍອອກໄປມ້ຶ້ໃດ?

- ມ້ົ່ໍ່ນ ມ້ົ່ໍ.

ນັ້ນອອກຈາກຫ້ອງໄປດ້ວຍທ່າທີເດ່ງຂຶ້ມ. ມ້ົ່ໍ່ນ, ໃນເວລາປັ້ນເຂົ້າເຊົ້າ ພວກເດັກນ້ອຍມາອ້ອນວອນຂໍໃຫ້ ໂຊບິດ ຢູ່ນິຄົມຕໍ່ໄປ, ພວກເຂົາຈະຮັບປະກັນເອົານັ້ນ.

- ພວກສູຊິຮັບປະກັນແນວໃດ?

ພວກເຂົາບໍ່ສາມາດເຂົ້າໃຈເທ່ືອ.

- ພວກສູຊິຮັບປະກັນນັ້ນແນວໃດ? ຄັ້ນວ່ານັ້ນຈົກມືດແຫລມນັ້ນອອກມາ ອີກເດ້ສູຊິເຮັດແນວໃດ?

- ຄັ້ນເປັ້ນແນວນັ້ນເຈົ້າກໍໄລ່ນັ້ນຫນີໂລດແລ້ວ.

- ໂຍ້ວເປັ້ນແນວນັ້ນ ກໍແປວ່າ ສູບໍ່ໄດ້ຮັບປະກັນອີ່ຫຍັງນັ້ນແຫລ້ວ. ຢ່າລະ, ຕ້ອງໃຫ້ນັ້ນໄປ.

ປັ້ນເຂົ້າເຊົ້າແລ້ວ, ໂຊບິດ ຫຍັບເຂົ້ົ້ມາຫາຂ້ົ້ພະເຈົ້ົ້ ແລະເວົ້ົ້ົ:

- ລາກ່ອນ, ອານໂຕນ ເຊມືອໂນວິດ, ຂອບໃຈສຳລັບບົດຮຽນ...

- ໄປດີ, ຢ່ານີແນວຄຽດໃຫ້ກັນລະ. ກ້ານ້ຳເຫັນວ່າລຳບາກກໍກັບມາ ແຕ່ຕ້ອງກ້ານໃຫ້ກາຍສອງອາທິດກ່ອນ.

ໄດ້ເດືອນຫນຶ່ງ ມັນກໍກັບມາຫ້ຽວຈ່ອຍຫ້ຽວເຫລືອງ.

- ຂ້ອຍກັບມາແລ້ວ, ຄືເຈົ້າເວົ້າໄວ້ບໍ່ຜິດ.

- ນຶ່ງບໍ່ພົບບ່ອນຢູ່ຊະນິດເຫມາະກັບນຶ່ງຊັ້ນຫວະ?

ມັນຍິ້ມແລ້ວເວົ້າວ່າ:

- ກະພົບຢູ່... ມັນບໍ່ອຶດອກບ່ອນຈັ່ງຊັ້ນ, ແຕ່ຂ້ອຍຈະມາຢູ່ນິຄົມ ແລະກໍຈະບໍ່ແຕະຕ້ອງຂອງເຫລມໆນີ້ອີກເລີຍ.

ພວກເດັກນ້ອຍຈັດພິທີຕ້ອນຮັບພວກເຮົາຢ່າງອົບອຸ່ນຢູ່ພາຍໃນຫ້ໍພັກເອງ.

- ໃນທີ່ສຸດ ເຈົ້າກໍບໍ່ກຶໂຫດໂກດເຄືອງມັນ!

ພວກເຮົາຫາກວ່າແລ້ວນ່າ!

ບົດທີ ໙

ຍຸກອັດສະວິນໃນກຶ້ນອຸກຮາອິນຍັງຢູ່

ໃນວັນອາທິດຫນຶ່ງ ອິດຊາຈີເມົາເຫລົ້າ, ພວກເຂົາເອົາມັນມາສົ່ງໃສ່ຫ້ອງຂ້າພະເຈົ້າ ຍ້ອນວ່າມັນເຮັດສຽງອຶກກະທຶກຄຶກໂຄມຢູ່ຫ້ໍພັກ. ເວລາມານັ່ງຢູ່ໃນຫ້ອງຂ້າພະເຈົ້ານັ້ນ ອິດຊາຈີ ລົມບ້າໄປທັ່ງເທຄວາມເວົ້າແບບຂີ້ເມົາອອກມາບໍ່ເຊົາ. ບໍ່ຈໍາເປັນຈະເວົ້າຫຍັງກັບມັນອີກແລ້ວ ຂ້າພະເຈົ້າປ່ອຍໃຫ້ມັນຢູ່ນໍາ ແລະສັ່ງໃຫ້ມັນນອນ. ມັນປະຕິບັດນໍາຢ່າງວ່ານ່ຽ.

ແຕ່ເມື່ອຂ້າພະເຈົ້າກ້າວຂາເຂົ້າໄປໃນຫ້ໍພັກນັ້ນ ກໍໄດ້ກຶ້ນເຫລົ້າກຸ້ນໄປຫມົດ. ເດັກນ້ອຍຫລາຍຄົນຫລີກລ່ຽງການປະຈັນຫນ້າກັບຂ້າພະເຈົ້າຢ່າງເຫັນໄດ້ຄັກ. ຍ້ອນບໍ່ຢາກຫາເລື່ອງຕູ່ໂທດຜູ້ໃດຜູ້ຫນຶ່ງດ້ວຍການຊອກຫາຜູ້ຜິດແທ້ໆ ຂ້າພະເຈົ້າຈຶ່ງເວົ້າແຕ່ພຽງວ່າ:

-ອົດຊາຈີ ບໍ່ໄດ້ເມົາຜູ້ດຽວດອກ, ຍັງມີຄົນອື່ນໆອີກທີ່ກິນເຫລົ້າຄືກັນ.

ຫລາຍມື້ຕໍ່ມາ ສະມາຊິກຂີ້ເມົາຫລາຍຄົນກໍອາລະວາດຂຶ້ນອີກໃນນິຄົມ, ບາງຄົນຫລົບຫລີກບໍ່ພົບປະກັບຂ້າພະເຈົ້າ ສ່ວນອີກພວກຫນຶ່ງ ຊໍ້າກີງກັບຂ້ານ, ພາກັນມາຫາຂ້າພະເຈົ້າໃນສະພາບເມົາມາຍ, ມາເວົ້າວອນລໍາພັນ ແລະສາລະພາບຮັກຕໍ່ຂ້າພະເຈົ້ານໍາພ້ອມ.

ພວກເຂົາບໍ່ພາກັນປິດບັງຈັກຫນ້ອຍວ່າ ພວກເຂົາໄດ້ຫລອຍອອກໄປກຸງນາຊາວບ້ານມາ.

ໃນຕອນຄໍ່າ ພວກເຮົາໄດ້ສົນທະນາກັນເຖິງຜົນຮ້າຍຈາກການຕົດເຫລົ້າເມົາມາຍ, ພວກເດັກນ້ອຍກຶກໂທດຍ້ອນເຫລົ້າໃຫ້ສັນຍາວ່າຈະບໍ່ດື່ມອີກ, ຂ້າພະເຈົ້າທໍາທ່າວ່າເຊື່ອຫມັ້ນຕໍ່ຄໍາສາບານອັນນີ້ ແລະບໍ່ລົງໂທດໃຜຫນົດ. ຂ້າພະເຈົ້າເຄີຍໄດ້ບົດຮຽນນ້ອຍໆອັນຫນຶ່ງມາແລ້ວ ແລະຮູ້ດີວ່າເພື່ອຕໍ່ສູ້ຕ້ານກັບການກິນເຫລົ້າເມົາຢານີ້ ມັນບໍ່ແມ່ນວ່າຕ້ອງໄປສູ້ກັບພວກເດັກນ້ອຍເລີຍ ແຕ່ຕ້ອງສູ້ກັບຄົນອີກພວກຫນຶ່ງຫຸ້ນ ແລະຄົນພວກນີ້ກໍບໍ່ຢູ່ໃກ້ຢູ່ໄກເລີຍ.

ພວກເຮົາລ່ອງລອຍຢູ່ທ່າມກາງທະເລແຫ່ງສຸລາເກືອນ. ຢູ່ໃນນິຄົມເອງ ພວກເຮົາມັກພົບເຫັນພະນັກງານຫລືຊາວນາຂີ້ເມົາຢູ່ເນືອງນິດ. ຍິ່ງໄປກ່ວານີ້ ຂ້າພະເຈົ້າມາຮູ້ໃນເວລານັ້ນວ່າ ໂກໂລວັນ ມັກໃຫ້ເດັກນ້ອຍໄປຊື້ເຫລົ້າວິດກາເກືອນມາໃຫ້ເຂົາເລື້ອຍໆ ແລະ ເຂົາເອງກໍບໍ່ປະຕິເສດເລື່ອງນີ້ເລີຍ:

-ໂຍ້ວ ແລ້ວມັນຊິເປັນຫຍັງລະ?

ກາລິນາ ອີວາໂນວິດ ເຊົ່ງບໍ່ກິນເຫລົ້າຈັກເທື່ອຮ້ອງກ້າກໃສ່ ໂກໂລວັນ ແຮງໆວ່າ:

-ຈັ່ງແມ່ນນຶ່ງບໍ່ເຂົ້າໃຈຫຍັງເນາະ. ນຶ່ງບໍ່ຮູ້ຫວະ ວ່າອຳນາດໂຊວຽດແປວ່າແນວໃດ? ນຶ່ງຄຶດວ່າອຳນາດໂຊວຽດຊິປ່ອຍໃຫ້ນຶ່ງແດກ ເຫລົ້າເກື່ອນຈັ່ງຊີ້ຫວະ?

ໂກໂລວັນ ດື້ນຍືກໆຢູ່ເທິງຕັ່ງຫນ່ອຍໂຊະເຊະແລະລັ່ນແອ້ດໆ ຢ່າງບໍ່ປອດໂປ່ງໃຈ ແລະເລີ່ມເວົ້າຕໍ່ແບບແກ້ໂຕວ່າ:

-ເອ໊ກະແມ່ນຢູ່ ແລ້ວຊິມີຫຍັງອີກລະ? ມີໃຜເກາະອັນບໍ່ກິນ ເຫລົ້າຫັ້ນນະ, ເຊີນກາມເບິ່ງ... ຜູ້ໃດກໍມີຫມັ້ຕົ້ນ, ກິນອີ່ນຕາມ ໃຈ. ຄັນຊິເອົາແທ້ ກໍເຊີນໃຫ້ອຳນາດໂຊວຽດຫັ້ນຢຸດກິນກ່ອນ ແມ...

-ອຳນາດໂຊວຽດໃດ?

-ອຳນາດໂຊວຽດງວງນັ້ນລະ! ຢູ່ໃນເມືອງເພິ່ນກໍກິນເຫລົ້າຄືກັນ, ຢູ່ບ້ານນອກບ້ານນາກໍຄືກັນ.

-ເຈົ້າຮູ້ບໍ່ວ່າມີໃຜແດ່ຂາຍເຫລົ້າເກື່ອນໃນບ້ານນີ້? ຂ້າພະເຈົ້າ ກາມໂຊຟຣິງ໊ຂຶ້ນ.

-ໂອ້ຍ ແມ່ນໃຜຊິໄປຮູ້ເດ້, ຂ້ອຍບໍ່ເຄີຍໄປຊີ້ເອງຈັກເທື່ອ. ເວລາຕ້ອງການຂຶ້ນມາ ຂ້ອຍໃຫ້ເດັກນ້ອຍໄປ, ເຈົ້າຊິເຮັດຫຍັງລະ? ຊິໄປຈັບເຂົາຊັ້ນຫວະ?

-ເຈົ້າຄຶດວ່າແນວໃດຊັ້ນ? ມັນແມ່ຢູ່ແລ້ວລະວ່າ ຂ້ອຍຊິເຮັດ ແນວນັ້ນ...

-ໂອ້ຍ! ຢາກອ້ວກ! ເບິ່ງແຕ່ພວກຕຳຫລວດເຮັດໄປນັ້ນເທາະ ບໍ່ເຫັນວ່າຊິມີຫຍັງດີຂຶ້ນ.

ມື້ຕໍ່ມາ ຂ້າພະເຈົ້າກໍເຂົ້າໄປໃນເມືອງ ເພື່ອຂໍອະນຸມັດຄຳສັ່ງທຳການປາບປາມຂະບວນເຮັດເຫລົ້າເຖື່ອນຢູ່ທ້ອງຖິ່ນພວກເຮົາ. ໃນຕອນແລງ ຂ້າພະເຈົ້າກັບກາລິນາ ອິວາໂນວິດ ໄດ້ປຶກສາຫາລືກັນ, ຜູ້ຊ່ວຍຂອງຂ້າພະເຈົ້າມີທ່າທີລັ່ງເລບໍ່ເຊື່ອຫັ້ນປານໃດ:

-ຢ່າໄປສົນນຳເຂົາທ້ອນແນວຂີ້ດຽດຫມູ່ນີ້ນ໋ະ, ຂ້ອຍຊິບອກເຈົ້າອັນຫນຶ່ງເດີ ມັນອອກມາຈາກຫ້ອງດຽວກັນຫມົດນັ້ນລະ. ຫມໍເກຣຊານີ ປະທານສະພາໂຊວຽດຂອງບ້ານເຮົາເອງກໍເປັນພັກພວກຂອງພວກເຂົາ ເຈົ້າຮູ້ບໍ່! ແລ້ວໂຮງນາກຸງໄຮ່ຫມູ່ນັ້ນ ບໍ່ວ່າເຈົ້າຊິໄປທາງໃດ ກໍລ້ວນແຕ່ແມ່ນລູກນ້ອງຂອງຫມໍເກຣຊານີຫມົດ. ເຈົ້າກໍຮູ້ຕື່ວ່າຄົນແກ່ອ້ວນນີ້ເຂົາບໍ່ເອົ້າມ້າໄກນາກັນ ແຕ່ເອົາງ່ວທໍ່ນັ້ນ. ເຈົ້າຕ້ອງເຂົ້າໃຈຕື່ວ່າ ບັດນີ້ ພວກເຂົາກຳ ກົງຈັກຮອບການໄວ້ໃນກຳມືແບບນີ້ແລ້ວ! - ກາລິນາ ອິວາໂນວິດ ເຍີ້ງກຳປັ້ນຂຶ້ນ, - ມັນກຳໄວ້ຫມົດແລ້ວ, ພວກຜາກນັ້ນ໋ະ, ເຈົ້າເຮັດຫຍັງບໍ່ໄດ້ດອກ.

-ກາລິນາ ອິວາໂນວິດ, ຂ້ອຍບໍ່ເຂົ້າໃຈ ເຈົ້າເວົ້າຫຍັງ? ເລື່ອງຫມູ່ນີ້ມັນກ່ຽວກັບເຫລົ້າເຖື່ອນຊັ້ນຫວະ?

-ໂອ້ຍກະຈັ່ງແມ່ນເຈົ້າຈ້າດອກນໍ! ຂະຫນາດວ່າໄດ້ຮ່ຳໄດ້ຮຽນມາປານນີ້ກະດາຍ! ເຈົ້າບໍ່ເຫັນດອກຫວະວ່າ ພວກເຂົາກຳອຳນາດທຸກຢ່າງໄວ້ໃນກຳມືແລ້ວ, ຢ່າໄປສົນນຳພວກເຂົາດີກ່ວາ ບໍ່ຊັ້ນມັນເອົາເຈົ້າມຸ່ນອຸ້ຍປຸ້ຍເລີຍລະ... ເຂົ້າໃຈບໍ?

ຂ້າພະເຈົ້າໄປຊ່ວຍພວກເດັກນ້ອຍຢູ່ຫໍພັກວ່າ:

- ພວກສູ, ກູບອກຊ້ຳເດ໊ ກູບໍ່ອະນຸຍາດໃຫ້ໃຜມາກິນເຫລົ້າ ເມົາມາຍຢູ່ຫນ້ອີກແລ້ວ, ສ່ວນຢູ່ໂຮງນາພຸ້ນກູຊິໄປຈັດການກັບພວກ ເຫລົ້າເກື່ອນຄືກັນ. ແມ່ນໃຜຊິໃປນຳແດ່?

ສ່ວນຫລວງຫລາຍ ມີທ່າທີລັ່ງເລແຕ່ບາງຄົນກໍໂດດຄຸບຂໍ້ສະ ເຫນີຂ້າພະເຈົ້າດ້ວຍຄວາມກະຕືລືລົ້ນ. ດວງຕາຄູ່ໃຫຍ່ດຳປີ໊ດຕາມ້າ ຂອງການາບານົບແຈ່ມໃສຮຸ່ງຈັບໆຂຶ້ນທັນທີ:

- ຄັກແທ້, ຄັກແທ້ໆ, ເກິ່ງເວລາສັ່ງສອນພວກກູລັກທ້ອງປຸ້ງ ຫມູ່ນ້ີແລ້ວ.

ຂ້າພະເຈົ້າຄັດເອົາສາມຄົນຄື ຊາໂດຣອບ, ໂອໂລຄອບ ແລະ ຕາຣາເນດ. ຈັນເສົາໃນການຄົ້ນຂ້ອນເດິກ ພວກເຮົາລົງມືອ່ານແຜນ ຍຸດທະສາດຂອງພວກເຮົາທັນທີ. ອາໄສແສງສະຫວ່າງຈາກໂຄມ ໄຟ, ພວກເຮົາຈຸ້ມຫົວກັນສຶກສາເບິ່ງແຜນຜັງຫມູ່ບ້ານ ຊ້ຳຂ້າພະ ເຈົ້າແຕ້ມຂຶ້ນ, ຕາຣາເນດເອົາມືເສີຍລອບຜົມສີແດງຂອງມັນໄວ້ ທ້າງປ່ອນດ້ວງລາຍໆຂອງມັນມາກວດເບິ່ງເຈ້ຍແລ້ວເວົ້ຂຶ້ນວ່າ:

- ເວລາພວກເຮົາກຳລັງກວາດຢູ່ເຮືອນຫນ້ຳ ເຮືອນຂ້າງໆກັນກໍ ຈະຟ້າວເອົາຫມ້ໍ້ຕົ້ມເຫລົ້າໄປເຊ່ືອງຫມົດທ່ໍ້ນັ້ນແລ້ວ. ສາມຄົນນ້ີ ຫນ້ອຍໂພດ.

- ຊັ້ນມີຫລາຍເຮືອນແທ້ຫວະທ່ີຕົ້ມເຫລົ້ານ່ໍ?

- ເກືອບທຸກເຮືອນພຸ້ນແຫລ້ວ, ເຮືອນ ມູດຊິເກຣຊານ, ອ້ງດຣ ກາໂປວິດ ແລ້ວກະໂຕເຮືອນປະທານບ້ານເອງຄືເກົ້າ ແຊກ ເກ ເກຣຊານີ້ນ້ຳ. ພວກຕະກູນ ແວກໂຄລາ ຫ້ັນໃຫ້ວ່າຫມົດ

ທຸກຄົນ ແລ້ວພວກແມ່ເກົ້າ ກໍເອົາເຫລົ້າຂາວໄປຂາຍຢູ່ໃນເມືອງ. ພວກເຮົາຄວນຊິ່ມັກັນຫລາຍຄົນກ່ວານີ້ບໍ່ຊັ້ນເຂົາຫຸ້ມໃສ່ ເຮັດໃຫ້ເຂົາຄັກຕ່ວາ!

ໂອໂລຄອບ ນັ່ງຢູ່ແຈຫນໍ່ງມິດງໜ້າທາວນອນ:

-ພວກເຂົາຫັ້ນຫວະຊິຈັດການພວກເຮົາ... ຮ໊ ກູຢາກເຫັນເດ້! ເອົາການຣາບານີ ຕົ້ນອີກຜູ້ຫນໍ່ງກໍພໍແລ້ວ, ບໍ່ມີໃຜກ້າເຮັດຫຍັງພວກເຮົາດອກ, ເຮົາຮູ້ນ່າ ພວກກຸລັກຫນີ້ ມັນຢ້ານພວກເຮົາຕ໊ຫຍັງຫນີ້.

ໂອໂລຄອບ ກຳລັງຕ໊ອເຂົ້າສູ່ວຽກງານຢ່າງງ່ຽບໆບໍ່ຫ້າວບໍ່ຫັນ. ເວລານັ້ນເຂົາຍັງບໍ່ສະຫນິດສະຫນົມກັບຂ້າພະເຈົ້າປານໃດ ທັ້ງບໍ່ມັກເລື່ອງລະບຽບວິໄນເທົ່າໃດ ແຕ່ມີຄວາມສັດທາໃນຕ໊ອຂອງຊາໂດຣອບຫລາຍ ຈັ່ງຊັ້ນມັນຈ໋ຶ່ງຕິດຕາມຝ່າຍນີ້ໄປຢ່າງບໍ່ສົນໃຈໃນເລື່ອງລະບຽບວິໄນໃດໆ.

ສ່ວນ ຊາໂດຣອບ ນັ້ນຍັງຄ໊ເກ່ງຢູ່, ເຂົາຍິ້ມຢ່າງສະຫງ໊ບສະຫງ່ຽມ ແລະຫມັ້ນໃຈ, ເຂົາຮູ້ຈັກເຮັດທຸກສິ່ງທຸກຢ່າງແບບບໍ່ສູນເສຍເອກະລັກປະຈ໋ຕ໊ອເລີຍ ທັ້ງບໍ່ມີການຟຸ້ມເຟືອຍພະລ້ຽງານໃນຕ໊ອແມ່ນແຕ່ປະລາມານຸດງວ. ແລະຂ້າພະເຈົ້າກໍເຊັ່ນດຽວກັນ, ບໍ່ເຄີຍມີຄວາມສັດທາເຊື່ອຫມັ້ນໃນຕ໊ອໃຜເທົ່າກັບ ຊາໂດຣອບ, ເພາະວ່າຊາໂດຣອບນັ້ນ ສາມາດກ້າວບຸກໄປທຸກແຫ່ງຫົນຕາມສຽງຮ້ອງຂອງຊີວິດຢ່າງບໍ່ມີການທໍ້ຖອຍສູນເສຍ ບຸກຄະລະພາບຂອງມັນໄປແມ່ນແຕ່ຫນ້ອຍດຽວ, ແລະບັດນີ້ມັນກໍຫັນໄປເວົ້າກັບດາຣາເນດວ່າ:

- ເຟດໍ, ຄັນມຶ່ງເວົ້າສຸດແລ້ວກໍບອກພວກເຮົາໂລດວ່າຄວນ ເລີ່ມຕົ້ນເອົາເຮືອນໃດກ່ອນ ແລະຕໍ່ໄປແມ່ນເຮືອນໃຜ, ແລ້ວມັ່ນ ຈຶ່ງວ່າກັນ ໂອໂລຄອບເວົ້າຖືກແລ້ວ ຄວນເອົາການາບານິບຕື່ມ, ມັນຮູ້ຈັກລົມກັບພວກກູລັກໃດ໋ຫມໍ້ນີ້ນ໊ະ, ເພາະວ່າມັນເອງກໍມາຈາກ ພວກກູລັກຄືກັນ. ບັດນີ້ ພວກເຮົາພາກັນໄປນອນໄດ້ແລ້ວ ເພາະ ວ່າມັ່ນຊິໄດ້ລຸກແຕ່ເດິກ, ກ່ອນທີ່ພວກເຂົາຈະພາກັນເມົາໂພດ ເນາະ... ແມ່ນບໍ່ ກຣິດສະໂກ?

- ແມ່ນໂພດ! - ໂອໂລຄອບ ຕອບທ້າຍ໊ມ.

ພວກເຮົາແຍກຈາກກັນ. ນາງນ້ອຍລິດາ ກັບ ເອົາກາເຕີຣິນາ ກຣິກເຮັບນາ ຍ່າງຫລົ້ນຢູ່ໃນເດິ່ນ, ລິດາດົ່ງເຂົ້າມາຫາຂ້າພະເຈົ້າ ແລະເວົ້າວ່າ:

- ພວກເດັກນ້ອຍເວົ້າວ່າ ເຈົ້າຊ໋ອກກ໋ວາດລາງພວກຕົ໋ມເຫລົ່ ເກ໋ອນ... ມັນຊິມີປະໂຫຍດຫຍັງ? ມັນແມ່ນວຽກງ່ວກັບການສຶກ ສາຂອງເຈົ້າຊັ້ນຫວະຫັ້ນ? ຂ້ອຍວ່າມັນບໍ່ຄ໋ເນາະ.

- ກະໂຕຕ່ອນວຽກງານການສຶກສາລະນາງເອ໋ຍ. ເຈົ້າຊິໄປກັບ ພວກເຮົາບໍ່ລະມັ້ນ໊ະ?

- ເຈົ້າຄ໋ດວ່າຂ້ອຍຊິຢ້ານໃດ໋ຫັ້ນເນາະ? ເອົາລະ ຂ້ອຍຈະໄປ! ແຕ່ຂ້ອຍຄ໋ດວ່າມັນບໍ່ແມ່ນວຽກງານການສຶກສາດອກ.

- ເຈົ້າຊິໄປນ໋ຳພວກເຮົາແທ້ຫວະ?

- ໄປແທ້.

ເອົາກາເຕີຣິນາ ເອ໋ນຂ້າພະເຈົ້າໄປລົມຕ່າງຫາກວ່າ:

- ເປັນຫຍັງເຈົ້າຈຶ່ງຊິເອົານາງນັ້ນໄປນ໋ຳເກ໋ະ?

- ບໍ່ເປັນຫຍັງດອກ! - ລີດາຮ້ອງມາໃສ່, - ຂ້ອຍຊິໄປຊື້ງນ້ີ ແຫລະ.

ດັ່ງນັ້ນຄະນະກຳມະການຂອງພວກເຮົາຈຶ່ງມີອົງປະກອບຮອດ ໕ ຄົນ.

ປະມານ ๗ ໂມງເຊົ້າ ພວກເຮົາພາກັນທຸບປະຕູຮ້ົວເຮືອນ ອ້ງດຣີ ກາໂປວິດ ເກຣຊານີ ເຊ່ິງເປັນຜູ້ຢູ່ໃກ້ກັບພວກເຮົາກ່ວາ ໝູ່. ມີສຸງຫມາເຫົ່າຕ້ອນຮັບພວກເຮົາຢ່າງອຶກກະທຶກ ແລະການ ໄຂປະຕູກໍແກ່ຍາວຢູ່ເກືອບ ໕ ນາທີ.

ກະໂຕພຶດຕິກຳແທ້ ເລ່ີມຂ້ຶນນຳຫລັງພ້ຶດອກ.

ມັນເລ່ີມຂ້ຶນ ເມ່ືອພໍ່ເກ້ົາ ອ້ງດຣີ ເກຣຊານີ ກ້າວອອກມາສູ່ເວ ທີສະແດງ, ລາວເປັນຊາຍຊະລາຮ່າງນ້ອຍ, ຫົວລ້ານ ແຕ່ມີເຄົາ ຍາວຕັດຢ່າງເອົາໃຈໃສ່. ພໍ່ເກ້ົາ ອ້ງດຣີ ຕ້ອນຮັບພວກເຮົາດ້ວຍ ນ້ຳສຸງແຂງກະແດ້ງວ່າ:

- ພວກເຈ້ົາຕ້ອງການຫຍັງ?

- ເຈ້ົາມີຫມ້ຶ້ຕ້ົມເຫລ້ົາ, ພວກເຮົາມາເພ່ືອກວາດລ້າງມັນ! ຂ້າພະເຈ້ົາເວ້ົ້າກັບລາວ, - ນ້ຶ້ແມ່ນຫນັງສ້ືອະນຸຍາດຈາກຕຳຫລວດ.

- ຫມ້ຶ້ຕ້ົມເຫລ້ົາຊ້ັນຫວະ? - ພໍ່ເກ້ົາກ່ານຄຶນດ້ວຍທ່າທ້ີຊຸ່ນໃຈ ທ້ັງກວາດແສງຕາອັນແຫລມຄົມເບ້ົ່ງໃບຫນ້າພວກເຮົາ ແລະເຄ້ືອງ ນຸ່ງທ້ີອ່າວຫວາດສຸງອຂອງພວກເດ້ັກນ້ອຍ.

ຂະນະດຽວກັນນ້ັນເອງ ສຸງຫມາກໍຝ້ົດສະບັ່ນຄັບທ້ີບຂ້ຶ້ນ, ກາຣາບານ້ີບ ໄດ້ຈອບຫລອຍເຂ້ົ້າໄປທາງຫລັງພໍ່ເກ້ົາ ທ້ັງເອົາໄມ້ ຄ້ອນຍາວໆເດ່ໄປທ້ັ່ງຖ້ືກຫມາແດງໂຕຫນ້ຶ່ງ, ຈ້ັ່ງຊ້ັ້ນເລ້ືຍເຮ້ັກໃຫ້

ຫມາເທົ່າຫອນຂົ້ນສຸດສຽງຫອງຂອງມັນຂະຫນາດສູງກ່ວາສຽງຫມາ ທຳມະດາຮອດສອງຂັ້ນ.

ພວກເຮົາພາກັນໂດດເຂົ້າໄປຕາມປ່ອງຮົ້ວ ເຮັດໃຫ້ຫມາແຕກ ກະຈາຍໄປ; ໂອໂລຄອບ ຮ້ອງເຮັດສຽງຫ້າວຕໍ່າອອກຕໍ່ສູ້ກັບພວກ ມັນ; ຫມາແລ່ນຫນີກະຈັດກະຈາຍໄປລີ້ຢູ່ແຈເດີ່ນບ້ານ ແຕ່ຍັງສົ່ງ ສຽງເຫົ່າຄ່ອຍໆ ສະຫລັບກັບສຽງຄາງຫົງໆບໍ່ຮຸນແຮງປານໃດ ອອກມາ ໃນຂະນະທີ່ຕິດຕາມສະພາບການໃນຂັ້ນຕໍ່ມາ. ການຮາບ ນົບ ເຂົ້າໄປຮອດໃນເຮືອນແລ້ວ, ເມື່ອພວກເຮົາກ້າວລ່ວງເຂົ້າໄປ ໃນເຮືອນ ພ້ອມດ້ວຍພໍ່ເກົ້າ ມັນເຍີ່ງສົ່ງທີ່ຊອກພົບມາໃຫ້ພວກເຮົາ ເບິ່ງດ້ວຍທ່າທີຂອງຜູ້ມີໄຊ.

-ນີ້ດ ຫມໍ້ຕົ້ມກັ້ນ!

ພໍ່ເກົ້າ ອ້ວນຕຸ ທຶບຕຸ້ນປັ້ງ, ຮ້ອນຮຸ່ມ ຮຶດຮັດຢູ່ໃນເສື້ອນອກ ຫນັງປອມໂຕໃຫມ່ອ່ອນ ທີ່ເປັນປະກາຍແວວວາວຸ້ພໍປານກັບເສື້ອ ຂອງນັກສະແດງລະຄອນຢູ່ໃນໂຮງ.

-ມ໊ວານນີ້ເຈົ້າໄດ້ຕົ້ມບໍ່? - ຊາໂດຮອບ ຖາມຂົ້ນ.

-ອື ຕົ້ມ, - ພໍ່ເກົ້າຕອບທັງເອົາມືນຸບເຄົາດ້ວຍທ່າທີງົງວາ ແລະຈົ້ງເບິ່ງ ຕາຮາແມດ ດ໊ງແກ້ວປຸ້ງບັນຈຸນ້ຳກັ່ນສີບົວແກ່ເຕັ້ມປ່ຽມ ແກ້ວຫນຶ່ງອອກມາຈາກກ້ອງຕັ່ງໃນແຈໃກ້ປະຕູ.

ໃນທັນທີທັນໃດນັ້ນ ພໍ່ເກົ້າກໍ່ຂົ້ນປານກອງໄຟຖືກລົມ. ລາວ ໂດດໃສ່ ຕາຮາແມດ ໂດຍຄຶດໄວ້ແລ້ວວ່າຕົນຈະສາມາດຈັບໂຕຝ່າຍ ນັ້ນໄດ້ ເພາະສະຖານທີ່ອັ່ງອໍຣິກເຮ້ືອໄປດ້ວຍແປ້ນມ້າ, ຮູບນັກບຸນ ແລະໂຕະ. ລາວຈັບ ຕາຮາແມດ ໄດ້ແທ້ ແຕ່ຊາໂດຮອບ ໄດ້ຮັບ

ເອົາແກ້ວປຸ້ງ ຜ່ານຫົວພໍ່ເກົ້າມາໄວ້ໃນມືຢ່າງຮຽບຮ້ອຍແລ້ວ ຈັ່ງຊັ້ນ ລາວກໍເລີຍໄດ້ເຫັນແຕ່ຮອຍຍິ້ມ ແບບກວນໆແກມເຍາະເຍີ້ຍຂອງ ຕາຮາແນດ ຜູ້ຊະນະ :

- ເປັນຫຍັງລະພໍ່ເກົ້າ ?

- ສູບໍ່ອາຍຫວະ ? - ພໍ່ເກົ້າ ອັງດຣິ ຮ້ອງຂຶ້ນຢ່າງເຈັບແສບ. - ສູບໍ່ຄິດລະອາຍແດ່ຫວະ ? ສູເຂົ້າມາໃນເຮືອນນີ້ ເພື່ອລັກເພື່ອປຸ້ນ ແລ້ວຍັງເອົາອີ່ນາງນີ້ມານຳ ! ໂຍ້ວ ປານໃດຄົນດີໆຊິໄດ້ຢູ່ກັນຢ່າງສຸກ ສະຫງົບແດ່ ແລ້ວຄົນຊົ່ວໆຄືພວກສູນັ້ນ ຊິຈົບຫາຍວາຍວອດ ເກາະ ?

- ໂທ້ ພໍ່ເກົ້າ ເຈົ້ານີ້ເປັນນັກກະວີພຸ້ນຕ່ອາຫນີ ! - ກາຣາບາ ນິບເວົ້າໃສ່ ທັງເຮັດທ່າທີປະກອບຢ່າງມີຊີວິດຊີວາ, ຫມໍເອົາໄມ້ ຄ້ອນເທົ້າຄ້ຳໄວ້ ແລ້ວຢືນຈ້ຳຢູ່ຕໍ່ຫນ້າພໍ່ເກົ້າວາງທ່າສະຫງ່າງາມເຄັ່ງ ຂຶມ.

- ສູຫນີຈາກເຮືອນກູດວນນີ້ ! - ພໍ່ເກົ້າອັງດຣິຮ້ອງຂຶ້ນ ແລະ ຄວາຈັບເອົາສ້ອມ ທີ່ຍັງວາງຢູ່ຂ້າງໆເຕົາໄຟຂຶ້ນມາຟາດໃສ່ບ່າຄູ່ຕໍ່ສູ້ ບາດຫນຶ່ງຢ່າງບໍ່ຄັກບໍ່ແນ່ປານໃດ.

ໂອໂລຄອບຫົວຣຶ ແລະຈັບເອົາອຸປະກອນດັ່ງກ່າວໄປວາງໄວ້ ບ່ອນເກົ່າຂອງມັນ ທັງດຶງໃຫ້ພໍ່ເກົ້າຕັ້ນມາສົນໃຈນຳຂັ້ນຕອນໃຫມ່ ຂອງເຫດການ :

- ພໍ່ເກົ້າເຈົ້າຫັນມາເບິ່ງພີ້ດີກ່ອນ ບ່າ.

ເມື່ອພໍ່ເກົ້າຫັນມາກໍເຫັນວ່າ ຕາຮາແນດພວມບິນລົງມາແຕ່ເຕົາ ໄຟ, ໃນມືຂອງມັນມີແກ້ວເຫລົ້າວິດກາອີກແກ້ວຫນຶ່ງ, ໃບຫນ້າ

ຂອງມັນຍົ້ມແຍ້ມແຈ່ມໃສຄືເກົ່າ ແລະແຝງຄວາມຈິງໃຈຢ່າງຈະແຈ້ງ. ພໍ່ເກົ້າອ້ວກຣິ ນັ່ງລົງແປ້ນມ້າ, ຄໍຕົກເຕື່ອຍທ້ຽໂບກມືສະແດງຄວາມ ອ່ອນໃຈ.

ນາງນ້ອຍ ລິດາ ມານັ່ງລົງໃກ້ໆລາວ ແລ້ວເວົ້າຂຶ້ນຢ່າງອ່ອນ ຫວານວ່າ:

-ອ້ວກຣິ ກາໂປວິດ! ເຈົ້າກໍຮູ້ດີແລ້ວເດ້ວ່າ ເພິ່ນຫ້າມຕົ້ມເຫລົ້າ ເອງ. ເຮັດແນວນີ້ຫມິດເປືອງເຂົ້າໃດ໋ ທ້ຽໆທີ່ວ່າຍັງມີຄົນອຶດຫິວຢູ່ ທົ່ວໆໄປ, ອັນນີ້ເຈົ້າກໍຮູ້ຕົ໋ວັນ.

-ມີແຕ່ພວກຂີ້ຄ້ານທໍ່ນັ້ນລະ ຈ່ຳອຶດຫິວ, ສ່ວນຜູ້ດຸຫມັ່ນເຂົ້າ ບໍ່ຫິວດອກ.

-ຊັ້ນເຈົ້າເດ້ພໍ່ເກົ້າ ເຈົ້າກໍເຮັດວຽກຫວະ? -ສາງແຈ່ມໃສກ້ຽ ວານຂອງ ຕາຣາແນດ ທີ່ນັ່ງຢູ່ເທິງເຕົ້າສອດມາໃສ່, -ບໍ່ແມ່ນສະ ເຕປານ ນຽດຊິໂປເຮັ້ງໂກພຸ້ນຫ,ວະເຮັດວຽກແທນເຈົ້ານ໋ະ?

-ສະເຕປານໃດ?

-ໂຍ້ວ ກະສະເຕປານ ທີ່ເຈົ້າໄລ່ຫນີຫັ້ນເດ້. ໄລ່ຫນີຢ່າງບໍ່ຈ່າຍ ເງິນ ບໍ່ໃຫ້ເຄື່ອງນຸ່ງຫົ່ມ... ຈ່ຳຊັ້ນມັນກໍເລີຍໄປຂໍຢູ່ນິຄົມນຳພວກ ເຮົາ.

ຕາຣາແນດ ເດ ປາກເຕາະລົ້ນໃສ່ພໍ່ເກົ້າຢ່າງມ່ວນໃຈ ແລ້ວກໍ ໂດດລົງຈາກເຕົ້າຜົ້ງ.

-ທ້ຽຫມິດນີ້ພວກເຮົາຊິຂົນໄປໄວ້ໃສ? -ຊາໂດຣອບ ຖາມ ຂຶ້ນ.

-ເອົາໄປຫຸບແລະເທກ້ຽມຢູ່ໃນເດີ່ນຫັ້ນ.

- ຫມໍ້ຕົ້ມນີ້ເດ້?

- ຫມໍ້ຕົ້ມກະຄືກັນ.

ພໍ່ເກົ້າບໍ່ອອກມາຍ້ອງສະການທີ່ປະຕິບັດການ ແຕ່ຍັງຄົງຢູ່ໃນເຮືອນ ເພື່ອຟັງການຕີລາຄາຄຸນຄ່າທາງດ້ານເສດຖະກິດ, ຈິດຕະສາດແລະສັງຄົມ ເຊິ່ງລິດາ ເປໂຕຣບນາ ລົງມືບັນຍາຍຂະຫຍາຍຄວາມສູ່ລາວຟັງຢ່າງຄ່ອງແຄ້ວລ່ວນໄຫລ. ຜູ້ຕາງຫນ້າສິດຜົນປະໂຫຍດຂອງຄອບຄົວ ທີ່ອອກມາຢູ່ໃນເດີ່ນແມ່ນພວກຫມາທີ່ນັ່ງໂຈ່ຢູ່ຕາມແຈຫ່າງໆດ້ວຍທ່າທາງໂກດຮ້າຍ ຈົນວ່າພວກເຮົາພາກັນອອກມາຮອດຖະຫນົນແລ້ວເທົ່ານັ້ນ ຫມາບາງໂຕຈຶ່ງເຫົ່າຫອນສະແດງການປະທ້ວງທີ່ອ່ອນຫລ້າຊ້າ ແລະໄຮ້ປະສິດທິຜົນອອກມາ.

ຊາໂດຣອບ ຜູ້ຫລົງເຫັນການໄກກວັກມືເອີ້ນເອົານາງນ້ອຍລິດາອອກມາ:

- ໄປ... ເມືອພ້ອຍພວກເຮົານີ້ນ່າ ບໍ່ຊັ້ນພໍ່ເກົ້າ ອ້ງດຣີ ຟັນເຈົ້າມຸ່ນອ້ຍປ້ຍດອກຫັ້ນ.

ລິດາ ແລ່ນຫລົບອອກມາ, ທ່າທີແຈ່ມໃສພໍໃຈນໍາການໂອ້ລົມສົນທະນາກັບເກົ້າ ອ້ງດຣີ:

- ເຈົ້າຮູ້ບໍ່... ລາວເຂົ້າໃຈດີຫມົດແລ້ວໃດ໋ຫັ້ນ! ລາວເຫັນພ້ອມກັບພວກເຮົາແລ້ວວ່າ ການເຮັດເຫລົ້າເຫຼືອນແນວນີ້ແມ່ນໂຫດໄພຢ່າງຫນຶ່ງ.

ພວກເດັກນ້ອຍຜູ້ຊາຍພາກັນຫົວຂວັນນາງໂຄບໆ, ການາບານິບ ຫລິ່ວຕາໃສ່ແລ້ວເວົ້າວ່າ:

- ລາວເຫັນດີນໍາຊັ້ນຫວະ? ຄັກລະບໍ້! ຄັນເຈົ້າຢູ່ລົມກັບລາວ

ດິນກ່ວານີ້ ຈັກຫນ້ອຍລາວຄືຈະເອົາຫມໍ້ຕົ້ມເຫລົ້າຂອງລາວອອກມາ ທຸບກົ້ມເອງນໍ?

-ຂອບໃຈພະເຈົ້າ ທີ່ເມຍຂອງລາວບໍ່ຢູ່ເຮືອນ ລາວອອກໄປ ໂບດຢູ່ ກ້ຽວຮອບກາຟຸ້ນ, -ຕາຮາເນດເວົ້າຂຶ້ນ, -ແຕ່ເຈົ້າກໍຍັງ ຊິໄດ້ລົມກັບແມ່ເກົ້າ ແວກໂຄລານີ້ອີກຢູ່.

ລູກາ ເຊມືອໂນວິດ ແວກໂກລາ ເຄີຍມາຫາພວກເຮົາຢູ່ນີ້ຄົມ ເລື້ອຍໆ ເພື່ອທຸລະກິດຕ່າງໆແລະພວກເຮົາເອງເມື່ອມີຄວາມຈຳເປັນ ຕ່າງໆເຊັ່ນ ຢາກຂໍຢືມສາຍຄໍ້ມ້າ, ກວນ, ກະໂລ່ງໄມ້ພວກເຮົາກໍ ແລ່ນໄປຫາລາວ. ຄົນຜູ້ນີ້ເປັນນັກການທູດເຕັມຕົວ, ຊ່ຳງເວົ້າຊ່ຳງ ລົມ, ດັດແປງຕົວເຂົ້າກັບສະພາບການທ່ວງໄປ. ລາວເປັນບຸລຸດ ເຈົ້າຊູ້, ຮູ້ກະຫນອມພົນເຄົ້າສີແດງແສດແລະກູດຳນັ້ນເປັນພິເສດ. ໃນບັນດາລູກຊາຍສາມຄົນຂອງລາວນັ້ນ ອ້ວານເປັນຜູ້ມີຊື່ສ່ຽງດ້ຽ ກ້ອງໄກກ່ວາ ๑๐ ກິໂລແມັດ ຍ້ອນຄວາມຊຳນານໃນການຫລົ້ນອັກ ກອກເດອ້ຽ ແລະ ຫມວກແຫ້ບຫນ່ອຍງາມແບບຕ່າງໆທີ່ເຂົາສຸບ ໃສ່!

ລູກາ ເຊມືອໂນວິດ ຕ້ອນຮັບພວກເຮົາຢ່າງແຂງຂັນ:

-ອ່າ... ເຊີນໆ, ໂອ້ ຄົນບ້ານໃກ້ເຮືອນຄຽງກັນນ່າພວກເຮົາ. ເຊີນເຂົ້າມາເລີຍ, ເຊີນໆ. ຂ້ອຍຮູ້ແລ້ວ ຂ້ອຍໄດ້ຍິນວ່າ ພວກ ເຈົ້າມາກວດຫມໍ້ຕົ້ມເຫລົ້າ. ດີແທ້ໆ, ພວກເຈົ້າເຮັດແນວນີ້ ແມ່ນການກະທຳອັນດີຢ່າງຫນຶ່ງ. ເຊີນນັ່ງເດີ! ນັ່ງແມ້ທ້າວ ຫັ້ນ ນ່າ ນັ່ງຕັ່ງນັ້ນລະ. ເປັນຈັ່ງໃດແດ່ລະວຽກງານຂອງພວກເຈົ້ານໍ? ພວກເຈົ້າຊອກຫາຊ່ຳງໄມ້ທີ່ຈະສ້ອມແປງເຄຫາ ແຕຣບແກໄດ້ແລ້ວ

ຫວະ? ຄັນບໍ່ທັນໄດ້, ບອກໂລດເດີ້, ຂ້ອຍຊິໄປ ນຣີກາດີໂຮບກາ, ຂ້ອຍຊິຫາມາໃຫ້ຈັກຄົນດອກ... ພວກເຈົ້າຫັ້ນໃຈໄດ້ໂລດເດີ້. ຊ່າງຂ້ອຍຫາມານີ້ນໍ່ະ!... ອ້າວທ້າວນັ້ນນໍ່ະ ເປັນຫຍັງບໍ່ນັ່ງລະ? ຂ້ອຍຫວະ? ຂ້ອຍບໍ່ມີດອກອັນຫມັ້ນເຫລົ້ານັ້ນນໍ່ະ ຂ້ອຍບໍ່ສົນນຳ ແນວຫມູ່ນີ້ດອກ! ຂ້ອຍບໍ່ຍອມເດັດຂາດ! ໃຜຊິເວົ້າຈັ່ງໃດກະເວົ້າ, ໃນເມື່ອອຳນາດໂຊວຽດຫ້າມປາມແລ້ວ ຂ້ອຍເຂົ້າໃຈດີທຸກຢ່າງເລີຍ ແຫລະ... ອ້າວແມ່ເດັກນ້ອຍເຈົ້າກະຫາຫຍັງມາຕ້ອນຮັບແຂກພວກ ເຮົາແດ່ເດ້!

ຊາມໃສ່ນົມຊຸ້ນເຕັມປ່ຽມ ແລະຈານເຂົ້າຫນົມແປ້ງໃສ່ເນີຍແຂງ ປາກົດຕິ້ວຂຶ້ນເທິງໂຕະ, ລູກາເຊມືອໂນວິດ ເຊື້ອເຊີນໃຫ້ພວກເຮົາ ຊີມລົດຊາດອາຫານເຫລົ່ານີ້ຢ່າງເປັນກັນເອງ. ລາວເວົ້າສຽງອ່ອ ຫ້ອນສະແດງໃນຕີຈິດແບບເປີດແປນ ພ້ອມດ້ວຍທ່າທີຕ້ອນຮັບຂັບ ສູ້ແບບອາດຍາໃຫຍ່. ຂ້າພະເຈົ້າສັງເກດເຫັ້ນແລ້ວວ່າ ພໍແຕ່ເຫັນ ຈານນົມຊຸ້ນທໍ່ນັ້ນ ຈິດໃຈພວກເດັກນ້ອຍກໍສັ່ນເຊັນຂຶ້ນໂລດ. ໂອ ໂລຄອບ ກັບ ຕາຣາແມດນັ້ນໃຫ້ວ່າບໍ່ທັນຫນ້າຫນີຈາກຈານອາ ຫານອີເສດອັນນີ້ເລີຍ. ຊາໂດຣອບເຊີ່ງຢືນຢູ່ໃກ້ໆປະຕູພຸ້ນກໍຫນ້າ ແດງຫົ້ນຂຶ້ນ, ເຂົາຍົ້ມຫນ້ອຍຫນຶ່ງແບບຜູ້ມີຈິດສຳນຶກວ່າຕົນກຳລັງ ຕົກຢູ່ໃນສະພາວະການຈົນຕາແຈ. ການາບານິບ ເຊີ່ງຢູ່ໃກ້ກັບຂ້າພະ ເຈົ້າ ກໍສວຍໂອກາດອັນອຳນວຍຊຸ້ມຊັບກັບຂ້າພະເຈົ້າວ່າ:

-ໂອ່... ຫ່ານ້ຳເອີ້ຍ! ແລ້ວຊິເຮັດແນວໃດລະນີ? ຕາຍ ແລ້ວ... ຈຳເປັນກະຊິໄດ້ກິນກ່ອນລະບໍ້ນໍ... ໂອ່ຍ... ນ້ຳລາຍແຕກ ຈ່ວກ ແລ້ວອິດບໍ່ຟັງດອກ... ອິດບໍ່ໄຫວແລ້ວ... ໃຫ້ຕາຍເທາະ!

ລູກາ ເຊມືອໂນວິດ ເອົາຕັ້ງຊ້ຶຫນ່ວຍຫນ້ຶງມາວາງໃຫ້ ຊາໂດ ຮອບ:

- ເອົາແມ້,... ເຊີນໂລດນ່າ, ຊິເປັນຫຍັງຄົນບ້ານໃກ້ເຮືອນ ຄຽງກັນແທ້ໆ! ຄັນຈ່ຽງຫນ້ຶງຫັ້ນພວກເຮົາຫາເຫລ້ົາວິດກາມາໃຫ້ ພວກເຈ້ົາກິນຈັກຫນ່ວຍກໍພໍໄດ້ຢູ່ ແຕ່ພວກເຈ້ົາເອງກໍມາຊອກຈັບ ມັນຢູ່ແລ້ວ...

ຊາໂດຮອບ ນ້ັ່ງລົງຕໍ່ຫນ້າຂ້ານ້ະເຈ້ົາ, ຕາຫລິບຕ່ໍາ ແລະຈັບ ເອົາເຂ້ົາຫນ້ຶມໄສ້ເນ້ຍແຂ່ງມາກິນເຄ້ົາກ້ອນ ທ້ັງເຮັດນ້ຶມຊຸ້ນເປ້ຶອນ ຄ້ັງລາມໄປທ່ົວ, ສ່ວນ ຕ້ານ້ັ້ນກໍເຮັດຫນວດຂາວໂຄ້ັງຂ້ຶນ ເກ້ືອບຮອດກ້ົກຫູ. ໂອໂລຄອບ ຍັດເຂ້ົາຫນ້ຶມແປ້ງໄສ້ເນ້ຍລົງຕ້ິດໆ ກັນຢ່າງບ່ໍສະແດງອາການຕ້ືນເຕ້ັນແມ່ນແຕ່ຫນ້ອຍດ່ວ.

- ເອົາເຂ້ົາຫນ້ຶມໄສ້ເນ້ຍມາຕ້ືມອ້ີກແດ່, - ລູກາ ເຊມືອໂນວິດ ຮ້ອງສ່ັ້ງເມຍຂອງລາວ, - ອ໊ອານຫລ້ົ້ນເພງອ້ີຫຍັງໃຫ້ຟ້ັງຈັກຫນ້ອຍ ດ໋.

- ຮອດຍາມເຂົ້ານ້ະໂບດແລ້ວເດ້, - ເມຍຂອງລາວບອກ.

- ຊິໄປຫ໊ອຊາຫຍັງເລ້ືອງນ້ັ້ນ, ຜູ້ເປັນຜົວຕອບໃນທັນທ້ີ, - ເພ້ືອຕ້ອນຮັບພ້ັ້ນອງບ້ານໃກ້ເຮືອນຄຽງ ໄປຈັດຊ້ານ້ັ້ນພ້ີເສດຈັກ ບາດກະໄດ້ຕ່ວ.

ທ້ານ໊ອານ ຊາຍຫນຸ່ມຜູ້້ງນ້ຶມແລະຮ່ງນຮ້ອຍ ໄດ້ຫລ້ົ້ນເພງ "ກ້ານ້ັ້ນ" ສູ່ພວກເຮົາຟ້ັງ. ກ້ານ້ັ້ນ ຫ໊ອຫລາຍຈ້ົນເກ້ືອບ ຕ້ິກແປ້ນມ້ັ.

- ນ້ັບວ່າພວກເຮົາເປັນແຂກຕ້ົນຮ່ງດເລ້ີຍ!

ຫລັງຈາກອີ່ນຫນໍ່ສໍ່ລາບດີແລ້ວ, ພວກເຮົາກໍ່ໂອ້ລົມກັນ. ລູກາ ເຊມືອໂນວິດ ສະຫນັບສະຫນຸນແຜນການພິຊິດເຄຫາສະ ກາມຕະກຸນແຕຣບແກ ຢ່າງແຂງຂັນຟົດຟື້ນ ແລະພ້ອມທີ່ຈະໃຫ້ການ ຊ່ອຍເຫລືອທາງດ້ານເສດຖະກິດແກ່ພວກເຮົາ, ລາວແນະນໍ່ວ່າ:

-ພວກເຈົ້າບໍ່ຄວນຈົມຢູ່ໃນປ່າຈັ່ງຊີ, ຄວນໄປຢູ່ພຸ້ນໄອທີ່ສຸດ ເທົ່າທີ່ຈະໄອໄດ້, ຈໍ່ເປັນຕ້ອງມີຜູ້ດູແລເບິ່ງແຍງມັນໃດ໋ເນີ. ພວກ ເຈົ້າຄວນຍຶດເອົາໂຮງສີນັ້ນນໍ່, ຕ້ອງເອົາມັນໄວ້ນໍ່. ສະພາ ບ້ານນັ້ນ ບໍ່ຮູ້ຈັກວຽກງານຂອງໂຕເອງດອກ, ພວກຊາວນາພາກັນ ຈົ່ມວ່າຊິຕາຍແລ້ວ, ໂອ້ຍ ຈົ່ມແທ້ຈົ່ມວ່າໃດ ຈໍ່ເປັນຕ້ອງມີແປ້ງ ອ່ອນ ເພື່ອເຮັດເຂົ້າຫນົມໃນວັນບຸນສະຫລອງພະເຈົ້າຂຶ້ນສະຫວັນ ກັບເຮັດເຂົ້າຫນົມໃສ່ໄສ້ນໍ່ອີກ ແລ້ວຊິພາກັນເຮັດແນວໃດ ລະຄັນ ວ່າຂາດແປ້ງອ່ອນໄປຈັ່ງຊີ?

-ສໍ່ລັບໂຮງສີນັ້ນ ພວກເຮົາຄິງຈະບໍ່ມີຄວາມສາມາດຄວບຄຸມ ມັນດອກ! - ຂ້າພະເຈົ້າເວົ້າຂຶ້ນ.

-ຈັ່ງໃດຈົ່ງວ່າບໍ່ມີຄວາມສາມາດ? ພວກເຮົາຊິຊ່ອຍດອກ... ເຈົ້າຮູ້ບໍ່ວ່າໄຫບ້ານແກອນີ້ນັບຖືເຈົ້າພໍ່ພຽງໃດ. ໃຜໆກະເວົ້າຢ່າງເປີດ ອົກເປີດໃຈວ່າ "ນີ້ຈັ່ງແມ່ນຄົນຄັກຄົນແມ່".

ເວົ້າມາຮອດບ່ອນຄັກໆນີ້ ພໍດີ ຕາຣາເນດ ກໍປາກົດຕົວຂຶ້ນຕໍ່ ຫນ້າປະຕູ ແລະມີສຽງຮ້ອງຄາງແບບຢ້ານກົວຈາກແມ່ເຈົ້າເຮືອນ. ຕາຣາເນດ ຖືພາກສ່ວນສໍ່ຄັນທີ່ສຸດຂອງຫມໍ້ຕົ້ມເຫລົ້າຂະຫນາດ ມາດຕະການຢູ່ໃນມືມານໍ່ນັ້ນຄື ທໍ່ຄົດ. ພວກເຮົາຮອດບໍ່ທັນສັງ ເກດຊໍ້າວ່າ ຕາຣາເນດຫລົບຫນີໄປແຕ່ຫວ່າງໃດ.

-ຂ້ອຍໄດ້ມັນຢູ່ຫ້ອງຕິດຂື່, -ຕາຣາເນດບອກ, ຢູ່ເທິງພຸ້ນ ເຫລົ້າວິດກາກໍມີໃດ້, ຍັງອຸ່ນໆຢູ່ເລີຍ.

ລູກາ ເຊມືອໂນວິດ ຫຍຸມຫນວດເຄົ້າໄວ້ໃນອຸ້ງມື ແລະວາງ ທ່າທີເຄັ່ງຂຶມຢູ່ຄາວຫນຶ່ງ. ແຕ່ໃນທັນທີທັນໃດ ເຂົາກໍໄດ້ສະຕິ, ຫຍັບເຂົ້າໄປຫາ ຕາຣາເນດ ແລ້ວຢຸດຢູ່ຕໍ່ຫນ້າມັນພ້ອມທັງຍົ້ມ ຫນ້ອຍຫນຶ່ງ. ຈາກນັ້ນ ລາວກໍຍົກມືຂຶ້ນເກົາກົກຫູ ແລະຫລິ່ວຕາ ກັບຂ້າພະເຈົ້າ:

-ທ້າວນີ້ຊິໄປໄກເດ້! ກະດີ້ກັນ, ຄັນວ່າເປັນແນວນີ້ ຂ້ອຍກໍ ບໍ່ຊ່າງຈະວ່າຫຍັງແຫລ້ວ... ບໍ່ວ່າຫຍັງຫມົດແລ້ວກະທ້າບໍ່ຄົງດບໍ່ຂຶມ ອີກເລີຍ. ໃນເມື່ອວ່າ ມັນແມ່ນກົດຫມາຍເດ້ນໍ. ກົດຫມາຍຍ່ອມ ເປັນກົດຫມາຍ. ຂ້ອຍຄິດວ່າພວກເຈົ້າຄືຊິທຸບມັນກໍ້ມເນາະ? ເອົາ ເລີຍ, ອ້ວນຊ່ອຍພວກເພິ່ນແດ່!

ແຕ່ແມ່ປ້າ ແວກໂຄລາ ນັ້ນຕົ້ບ່ຍອມປະນີປະນອມຕາມຈິດໃຈ ເອົ້ອເຟື້ອຂອງຜົວບັນດິດເລີຍ, ລາວຍາດດຶງເອົາທ່ໍຄົດຈາກມືຂອງ ຕາຣາເນດ ແລ້ວຮ້ອງຂຶ້ນວ່າ:

-ແມ່ນໃຜອະນຸຍາດໃຫ້ພວກສູທຳລາຍມັນຮ? ແມ່ນໃຜ? ພວກ ສູບໍ່ໄດ້ເຮັດມັນຕ່ອາແລ້ວເປັນຫຍັງຈົ່ງມີສິດທຳລາຍມັນ! ພວກນີ້ ສຸດອັບປີ, ຫນີໄປແມ້, ຫນີຈາກບ້ານຫູແມ້ ບໍ່ຊັ້ນກູທຸບຫົວສູກ້ໍ ໃດ...

ແມ່ປ້າແວກໂຄລາ ປ້ອຍດ່າໄປຄົນດງອບໍ່ຢຸດບໍ່ເຊົາເປັນ. ສາວ ນ້ອຍ ລິດາ ເຊົ່ງມາຮອດເວລານັ້ນຍັງຄົງຍືນຢູ່ຢ່າງນົດໆໃນແຈຫ້ອງ ເບ້ືອງຫນຶ່ງ ພະຍາຍາມໂຂກາບເຈລະຈາແບບສັນຕິກັບລາວດ້ວຍການ

ຈາລະໄນເກົ່າຄຸນນະໂທດຂອງເຫລົ້າເກົ່ອນ, ແຕ່ຍາແມ່ເຈົ້າເຮືອນ ມືປອດໃຫຍ່ແຂງແຮງສົມຄວນ. ແກ້ວເຫລົ້າວິດກາຫລາຍແກ້ວ ແຕກມຸ່ນໄປແລ້ວ, ກາຣາບານົບ ໃຊ້ຄົມເຫລັກຄູ່ຫນຶ່ງທຸບທຳລາຍ ຫມໍ້ຕົ້ມເຫລົ້າຢູ່ກາງເດິ່ນຮາບຮ້ອຍໄປແລ້ວ, ລູກາ ເຊມືອໂນວິດ ກ່າວອຳລາກັບພວກເຮົາຢ່າງອ່ອນຫວານ ທັງຮ້ອງຂໍໃຫ້ພວກເຮົາກັບ ມາຫາລາວອີກ ໃນມໍ້ຕໍ່ໄປ ແລະເນັ້ນຍ້ຳວ່າລາວບໍ່ໄດ້ຄຶງດຶນ; ຊາ ໂດຣອບ ຈັບມືກັບ ອີວານ ແລະທ້າວນີ້ກໍພ້າວຈັບອັກກອກຂຶ້ນມາ ຫລົ້ນ ແຕ່ປ້າແວກໂຄລານັ້ນຕິ ລາວບໍ່ຢຸດຮ້ອງຢຸດໃຫ້ຈັກເທື່ອ ທັງ ຊ່າງສັນຫາຄຳປ້ອຍດ່າຫລາຍສີສັນມາຈາລະໄນການປະພຶດຂອງພວກ ເຮົາທັງສາບແຊ່ງໃຫ້ພວກເຮົາຈົບຫາຍວາຍວອດໃນອະນາຄົດ. ຢູ່ ໃນເດິ່ນບ້ານຂອງພວກໄທເຮືອນໃກ້ຄຽງ, ພວກແມ່ຍິງອອກມາຢືນ ເບິ່ງຢ່າງນຶດໆ, ຫມາຮ້ອງແລະເຫົ່າທັງໂດດຄະໂຍງມາຈົນສຸດໂສ້ ເຊືອກທີ່ຜູກຢູ່ກັບຮົ້ວຫນາມຫມາກຈັບອ້ອມເດິ່ນ, ສ່ວນພວກຜູ້ ຊາຍເຊິ່ງກຳລັງລ້າງຄອກມ້າຢູ່ນັ້ນກໍ່ວາກຫນ້າມາເບິ່ງ.

ພໍແຕ່ພວກເຮົາອອກມາຮອດກະຫນິນເທົ່ານັ້ນ ກາຣາບານົບ ກໍໂປອີ່ງຮ້ອ:

-ໂອ້ຍ ເຮົາໄປບໍ່ໄຫວແລ້ວ, ໃຫ້ຕາຍແມ້ເຮົາໄປບໍ່ໄຫວແທ້ໆ ໃດ! ຈັ່ງແມ່ນຕ້ອນຮັບກັນພິລຶກເວີ້ຍ, ລາວວ່າແນວໃດແດ່ເກາະອີ່ ນາຍນັ້ນນ໋ະ? ລາວວ່າໃຫ້ທ້ອງສູເບ້ຍຍ່ຳຕາຍຍ້ອນນົມຊຸ້ນທີ່ຍັດເຂົ້າ ໄປຫັ້ນຊຸ້ນຫວະ? ໂອ້ ທ່ານໂຕເດເປັນແນວໃດເວີ້ຍ ໂວໂລດອບ?

ໃນມຶ້ດນອນນັ້ນ ພວກເຮົາທຸບຫມໍ້ຕົ້ມເຫລົ້າໄດ້ ຝ ຫນ່ວຍ, ທາງຝ່າຍເຮົາບໍ່ມີການເສຍຫາຍຫຍັງເລີຍ ພໍແຕ່ອອກມາຈາກເຮືອນ

ຫລ້າສຸດທ້າຍເທົ່ານັ້ນ ພວກເຮົາກໍປະເຊີນຫນ້າກັບແຊກເກ ເປ ໂຕຣວິດ ເກຣຊານີ ປະທານສະພາໂຊວຽດຂອງບ້ານທັນທີ. ທ່ານ ປະທານມີອາດທ່າຄືກັບນາຍທະຫານໂກລັກແທ້ໆ, ລາວມີຜົມດຳ ເປັນມັນ ແລະຫນວດຍ່ອມໆໂຄ້ງເປັນວົງ. ເຖິງແມ່ນວ່າລາວຍັງ ຫນຸ່ມຢູ່ກໍຕາມ ແຕ່ລາວກໍເປັນຜູ້ເຮັດວຽກທຳນາທີ່ດີເດັ່ນກ່ວາຫມູ່ ໃນຂົງເຂດນີ້ ທັງເປັນຜູ້ທີ່ຄົນທັງຫລາຍຖືວ່າມີຄວາມສາມາດທີ່ສຸດ. ລາວຮ້ອງມາໃສ່ພວກເຮົາແຕ່ໄກໆວ່າ :

- ເຮ້ີຍ...ຢຸດກ່ອນ!

ພວກເຮົາຢຸດຕາມຄຳສັ່ງ.

- ສະບາຍດີ, ລາວຮ້ອງໃສ່ - ຂໍອະນຸຍາດເດ້ີ, ຂໍຖາມແດ່, ເພື່ອຮູ້ຊຶ່ງດອກວ່າ ພວກເຈົ້າໄດ້ຮັບອະນຸຍາດອັນໃດ ຈຶ່ງມາເຮັດຮຸນ ແຮງທຸບທຳລາຍຫມໍ້ກັ້ນຢູ່ບ້ານປະຊາຊົນ, ພວກເຈົ້າມີສິດອັນໃດ?

ລາວເອົາມືຖົດຫນວດຕື່ມອີກ ແລະຈ້ອງຕາເບ່ິງເຄື່ອງນຸ່ງອັນບໍ່ ແມ່ນເຄື່ອງແບບເຈົ້າຫນ້າທີ່ຂອງພວກເຮົາດ້ວຍທ່າທີເຈາະຈົ້ມ.

ຂ້າພະເຈົ້າເດ່ຫນ້າສືມອບສິດ "ປະຕິບັດການຢ່າງເດັດຂາດ" ໃຫ້ລາວເບ່ິງຢ່າງມິດໆ.

ລາວຈັບມັນພິກໄປພິກມາຫລາຍຫລົບແລະສົ່ງໃຫ້ຂ້າພະເຈົ້າຄືນ ຢ່າງບໍ່ເຕັມໃຈ.

- ກໍແມ່ນໃບອະນຸຍາດຢ່າງຫນ້ຳຢູ່ດອກ, ແຕ່ວ່າປະຊາຊົນບໍ່ດີໃຈ ເດ້ີ. ຖ້າຫາກວ່ານິຄົມທາງໃດກໍສາມາດເຮັດແນວນ້ີແລ້ວ ຊິມາຮັບ ປະກັນວ່າ ອຳນາດໂຊວຽດຊິໄປຮອດໃສ? ຂ້ອຍນ້ີບ່າ ຂ້ອຍກໍຕໍ່ສູ້ ຕ້ານການເຮັດເຫລ້ົາເຫ່ືອນຜູ້ຫນ້ຳ.

- ແຕ່ເຈົ້າເອງ ກໍມີຫນ້ຳໜ້ານັ່ງຢູ່ບ້ານຄືກັນ, - ຕາຣາເນດເວົ້າຂຶ້ນດ້ວຍສຽງຫວານໆ.

ຫລັງຈາກລັກເຫຼືອດເຫຼັ້ງຕາເບິ່ງຫນ້າຂອງທ່ານປະທານມາແລ້ວ ຢ່າງບໍ່ເກງໃຈຜູ້ກ່ຽວ.

ທ່ານປະທານງວາກມາຫາຕາຣາເນດ ຜູ້ຢູ່ໃນເສື້ອຜ້າຂາດລ້ອຍ ແລ້ວຮ້ອງໃສ່ວ່າ:

- ມັນບໍ່ແມ່ນເລື່ອງຂອງນຶ່ງ. ນຶ່ງແມ່ນໃຜຮຶ? ສະມາຊິກນິຄົມຫວະ? ພວກເຮົາຊິຍົກເລື່ອງນີ້ຂຶ້ນພ້ອງຂັ້ນເທິງ ແລ້ວຊິໄດ້ເຫັນກັນວ່າ ເພິ່ນຊິໃຫ້ສິດພວກຊາວຫນຸ່ມຕິດໃພ້ງົມຄືສຸມາດ່າປະທານສະພາໂຊວຽດທ້ອງຖິ່ນຢ່າງເສລີ່ຈັ່ງຊັ້ບ?

ພວກເຮົາແຍກທາງກັນໄປ, ລາວໄປຕາມທາງຂອງລາວ, ພວກເຮົາໄປຕາມທາງຂອງພວກເຮົາ.

ການລົງມືເຮັດວຽກຂອງພວກເຮົາໄດ້ຜົນປະເສີດຫລາຍ. ມື້ຕໍ່ມາ ຊາໂດຣອບ ເວົ້າກັບພວກລູກຄ້າຢູ່ໃກ້ໆໂຮງຕີເຫລັກວ່າ:

- ວັນທິດຫນ້າ ພວກເຮົາຊິເຮັດແບບໃຫມ່, ເອົາກັນຫນິດນິດນຶ່ງລະ, ທັງ ๕๐ ຄົນເລີຍ.

ປະຊາຊົນຊາວບ້ານ ດົງຫນວດຍຶກໆ ແລະຟ້າວເຫັນດີນຳວ່າ:

- ກືກແລ້ວລະເຮັດແນວນີ້ນ່າ. ມັນເປັ່ງເຂົ້າແລະທາງການເພິ່ນກໍຫ້າມອີກ, ມັນກືກຕ້ອງແລ້ວ.

ການກິນເຫລົ້າເມົາມາຍຢູ່ໃນນິຄົມເປັນອັນຢຸດເຊົາໄປ ແຕ່ອະບາຍມຸກອັນໃຫມ່ຊ້ຳຜາກິດຕິ ຂຶ້ນຄື ການຫລິ້ນໄພ້. ທຳອິດພວກ

ເຮົາສັງເກດເຫັນວ່າຢູ່ໃນໂຮງອາຫານນັ້ນ ເດັກນ້ອຍບາງຄົນກິນເຂົ້າ
ຢ່າງບໍ່ມີເຂົ້າຈີ່ ແລະຜູ້ທີ່ເຮັດອະນາໄມຫ້ອງນອນຫລ໊ວງກ໊ຂ໊ວງດ
ອ໋ນໆນັ້ນບໍ່ແມ່ນຜູ້ທ໋ກ໊ກຮັບແຕ່ຕັ້ງໃຫ້ເຮັດ.

- ເປັນຫຍັງໂຕຈ໋ຳມາກວດຫ້ອງນ້ຳ ແທນທ໋ີ່ຊິແມ່ນ ອ໊ອານົບ?

- ມັນຮ້ອງຂໍໃຫ້ເຮັດແທນ.

ການເຮັດວຽກແທນກັນຕາມຄຳຂໍຮ້ອງກາຍເປັນເລ໋ື່ອງທຳມະດາ
ແລະກຸ່ມນັກຂໍ໋ດີກາປະເພດນ້ີ້ໄດ້ກ໋ໍ່ຕ໊ໍ້ອ໊ຶ້ນແລ້ວກຸ່ມຫນ໋ຶ່ງ. ຈຳນວນ
ເດັກນ້ອຍອິດອາຫານ ແລະແບ່ງສ່ວນຂອງກິນໃຫ້ແກ່ຫມູ່ຄູ່ນັບມ້ື້ນັບ
ມ໊ີຫລາຍ໊ຶ້ນ.

ຢູ່ໃນນ໊ິຄົມເດັກເລ໋ັ່ນນ້ີ ມັນບ໋ໍ່ອາດມ໊ີ ເລ໋ື່ອງຊ໋ົ່ວຮ້າຍອັນໃດຮ້າຍ
ແຮງໄປກ່ວາການຫລ໋ົ້ນໄພ້. ມັນຂັບໄລ່ພວກເດັກນ້ອຍອອກຈາກວ໋ົງ
ລ໊ດສະຫ໋ມ໊ການບ໋ໍລ໋ິໂພກຕາມອັດຕາ, ບ໋ີບບ໋ັງຄ໋ັບໃຫ້ພວກເຂົາຊ໋ອກ
ຫາວ໋ິທ໋ີທາງໃຫ້ໄດ້ຍ໋ັງອາຫານມາຕ໋ື່ມ ແລະວ໋ິທ໋ີການອັນດ໋ງອ໋ທ໋ີ່ພວກ
ເຂົາເຮັດໄດ້ກ໋ໍ່ແມ່ນການລັກ. ຂ້າພະເຈົ້າພ້ອໂຈມຕ໋ີສັດຕູຕ໋ໍ່ອໃຫ໋ມ່ນ້ີ
ທ໋ັນທ໋ີ.

ອ໋ອບຊ໋ານ໋ເຮັນໂກ ບ່າວນ້ອຍຜູ້ແຂງແຮງ ແລະເ໋ີ້ກບ໋ານຄ໋ົນ
ຫນ໋ຶ່ງໄດ້ລ໋ັກຫນ໋ີອອກຈາກນ໋ິຄົມໄປ, ທ໋ັງໆທ໋ີ່ວ່າມັນຕ໋ິດນ໋ິຄົມພ໋ໍ້ແຮງ
ແລ້ວ. ການ໋ຶ້ບສ໋ວງຫາເຫດຜົນທ໋ີ່ພາໃຫ້ມັນຫນ໋ີ ເ໋ົ່ຊ໋ົ່ງຂ້າພະເຈົ້າ
ເຮັດໄປນັ້ນບ໋ໍ່ໃຫ້ຄວາມຈະແຈ້ງໃດໆເລ໋ີຍ. ສ໋ອງ໋ັ້ຕ໋ໍ່ມາ ຂ້າພະເຈົ້າ
ພ໋ບກ໋ັບມັນຢູ່ຕະຫລາດນ໋ັດໃນເມ໋ືອງ. ເ໋ົ່ງວ່າຂ້າພະເຈົ້າຊູ໋່ໃຫ້ມັນ
ກ໋ັບມານ໋ຳເທ໋ົ່າໃດ ມັນກ໋ໍ່ບ໋ອມກ໋ັບມາ. ເ໋ວລາເວ໋ົ້າກ໋ັບຂ້າພະເຈົ້ານ້ັ້ນ
ມັນມ໋ີທ໋ົ່າທາງເປັນກ໋ັງວົນອ໋ກ໋ັ່ງຫລາຍທ໋ົ່ສຸ໋ດ.

ເມື່ອກັບມານິຄົມໃນຕອນແລງ ຂ້າພະເຈົ້າຊູ່ເດັກນ້ອຍຢ່າງເອົາ ຈິງເອົາຈັງວ່າ:

- ເປັນຫຍັງ ອອບຊາເຮັນໂກ ຈຶ່ງຫນີໄປ?

- ເຮັດແນວໃດພວກເຮົາຈຶ່ງຈະຮູ້?

- ພວກສູຮູ້ດີທີ່ສຸດ.

ຄຳຕອບຄືຄວາມຜິດ.

ຕົກກາງຄືນ, ຂ້າພະເຈົ້າເອົ້ນ ກາລິນາ ອີວາໂນວິດ ມາຊ່ອຍ ຄົ້ນຫ້ອງຫນັງຫຸກຫ້ອງ. ຜົນຂອງມັນເຮັດໃຫ້ຂ້າພະເຈົ້າປະຫລາດ ໃຈ: ຢູ່ກ້ອງຫນອນ, ໃນແອບ, ໃນກັບ, ໃນກົ່ງສົ້ງກົ່ງເສື້ອຂອງ ເດັກນ້ອຍບາງຄົນ, ພວກເຮົາພົບວ່າມີການສະສົມນ້ຳຕານໄວ້ຢ່າງ ຫລວງຫລາຍ. ປາກົດວ່າ ບູຊູນ ເປັນຜູ້ຮັ່ງມີກ່ວາຫມູ່: ຢູ່ໃນແອບ ຫນຶ່ງເຊື່ອຂ້າພະເຈົ້າອະນຸຍາດໃຫ້ມັນເຮັດຂຶ້ນເອງນັ້ນ ມີນ້ຳຕານຢູ່ ຮອດ ສິບ ປອນ*, ແຕ່ຜູ້ຫນ້າສົນໃຈກວ່າຫມູ່ແມ່ນມີເຕຍກົນ. ພວກເຮົາພົບວ່າ ຢູ່ໃນຫມວກສຸບຫນັງແກະຫນ່ວຍເກົ່າຫນຶ່ງທີ່ ເຊື່ອງຢູ່ກ້ອງຫນອນຂອງມັນ ມີຫລຽນທອງແດງແລະຫລຽນເງິນ ຢູ່ຮອດ ຫ້ຳສິບ ຮູບ.

ບູຊູນ ຍອມສາລະພາບຢ່າງຈິງໃຈດ້ວຍທ່າທາງຮັບຜິດຕົນຂຶດ ວ່າ:

- ຂ້ອຍຫລົ້ນໃຫ້ໄດ້.

- ຫລົ້ນກັບເດັກນ້ອຍຫັ້ນຫວະ?

---

*ຫົວຫນ່ວຍຊັ່ງນ້ຳຫນັກ, ໑ ປອນປະມານ ໔໕໐ ກຣາມ

- ເອີ...ເອີ!

ມິເຕຍກິນ ເວົ້າວ່າ:

- ຂ້ອຍບໍ່ຍອມບອກຫຍັງກັບເຈົ້າດອກ.

ນ້ຳຕານ ແລະວັດຖຸສິ່ງຂອງປະເພດອື່ນໆເຊັ່ນເສື້ອແຂນຍາວ, ຜ້າມັດຜົມ, ກະເປົາຖືແມ່ຍິງເຫລົ່ານີ້ ມ້ວນຢູ່ໃນຫ້ອງນອນນັກຮຽນຍິງທ້າວສາມຄົນຂອງພວກເຮົາຄື ໂອເລຍ, ຮາຍອິດຊາ ແລະນາຮຸດ ເຊຍທ້າວສາມຄົນບໍ່ຍອມບອກວ່າ ເຄື່ອງຂອງເຫລົ່ານີ້ແມ່ນຂອງໃຜ, ໂອເລຍກັບນາຮຸດເຊຍພາກັນຮ້ອງໄຫ້. ສ່ວນ ຮາຍອິດຊາ ນັ້ນນິ່ງນບຢູ່.

ສາວນ້ອຍທ້າວສາມນີ້ ຖືກສົ່ງຕົວມາໃຫ້ພວກເຮົາໃນຖານະຂີ້ກະໂຫຍຂອງນຳເຮືອນ. ແນ່ນອນວ່າ ໂອເລຍ ໂວໂຣໂນວາ ນັ້ນຖືກແກ່ຖືງເຂົ້າໄປພົວພັນກັບເລື່ອງບໍ່ຈິບບໍ່ງາມປານໃດເລື່ອງຫນ້ອຍ ຢ່າງບ້າເອີນທີ່ສຸດ ຄືກັນກັບສາວໃຊ້ໄວຫນຸ່ມຄົນອື່ນໆນັ້ນເອງ. ນາຮຸດເຊຍ ເລັບເຊັ່ນໂກ ກັບ ຮາຍອິດຊາ ໂຊໂກໂລວາ ນັ້ນເປັນຄົນຫນ້າໝຶ ດ້ານ ແລະເລ້ລ້ອສຸດຂະຫນາດ, ທ້າງສອງຫລົ້ນຫົວແລະດື່ມເຫລົ້າ ນຳພວກເດັກນ້ອຍຜູ້ຊາຍ ກະທັ່ງຮອດການຫລົ້ນໄພ ເຊົ່ງສ່ວນ ຫລວງຫລາຍແລ້ວ ແມ່ນຫລົ້ນກັນຢູ່ໃນຫ້ອງຂອງພວກເຂົາຫນ້ເອງ. ນາຮຸດເຊຍຍັງແຕກຕ່າງຈາກຫມູ່ອີກຍ້ອນນິໄສຂີ້ໂມໂຫໃຈຮ້າຍງ່າຍຂອງນາງ; ນາງຮ້າຍດ່າຕິບຕີຫມູ່ເລ້ອຍໆທ້າຜິດກັບພວກຜູ້ຊາຍຍ້ອນເລື່ອງໄຮ້ສາລະຢູ່ສະເຫມີ, ຖືວ່າຕົນເອງເປັນຄົນຫນິດຫວ້ງແລ້ວ. ເມື່ອມີຜູ້ໃດຜູ້ຫນ່ຶ່ງຕຳຫນິແນະນຳ, ນາງກໍຕອບແບບດ ງອກັນນ້ີວ່າ:

- ຢ່າມາຍາກນຳຂ້ອຍເທາະ, ຂ້ອຍມັນແມ່ນຄົນໂສກົ້ມແລ້ວລະ.

ຣາຍອິດຊາເປັນຄົນອ້ວນໃຫຍ່, ຂີ້ດຽດ, ຂີ້ຄ້ານ, ມັກຫລິ້ນທີ່ສຸດແຕ່ ບໍ່ໂງ່ຈ້າຈັກຫນ້ອຍ ທັງມີການສຶກສາຢູ່ແດ່. ແຕ່ກ່ອນນາງເຄີຍເຂົ້າຮຽນໃນວິທະຍາໄລ, ພວກຄູສອນແມ່ຍິງຂອງພວກເຮົາຕ້ອງການໃຫ້ນາງກະກຽມຕົວສອບເສັງເຂົ້າ ມະຫາວິທະຍາໄລກຳມະກອນ. ພໍ່ຂອງນາງເປັນຊ່າງເຮັດເກີບຢູ່ໃນເມືອງ ແຕ່ໄດ້ເສຍຊີວິດຍ້ອນອຸບັດຕິເຫດໃນວົງເຫລົ້າຫວ່າງສອງປີກ່ອນ. ສ່ວນແມ່ກໍຕິດເຫລົ້າແລະທ່ຽວຂໍທານໄປຕາມກະຫນົນ. ຣາຍອິດຊາ ປະຕິເສດວ່າບໍ່ແມ່ນແມ່ຂອງຕົນ ທັງເລົ່າວ່າມີຄົນເອົານາງໄປວາງໄວ້ທີ່ຕໍ່ຫນ້າປະຕູບ້ານ ໂຊໂກລອບ ຕັ້ງແຕ່ຄາວນາງຍັງນ້ອຍໆພຸ້ນແຕ່ພວກເດັກນ້ອຍຜູ້ຊາຍພາກັນເວົ້າວ່ານາງເສກສັນປັ້ນແຕ່ງເລື່ອງນີ້ຂຶ້ນເອງ.

- ຈັກຫນ້ອຍມັນຊິເວົ້າສູ່ເຈົ້າຟັງດອກວ່າພໍ່ມັນເປັນເຊື້ອເຈົ້າ.

ຣາຍອິດຊາ ກັບ ນາຮູດເຊຍ ຮັກສາວາດປະພຶດຕົນຢ່າງບໍ່ຂຶ້ນກັບພວກເດັກນ້ອຍຜູ້ຊາຍ ທັງໄດ້ຮັບຄວາມເກງໃຈນັບຖືຈາກພວກເຂົາໃນຖານະ "ນາງໂຈນ" ຜູ້ມີບົດຮຽນແລະປະສົບການມາແລ້ວ. ຈັ່ງຊັ້ນ ພວກເຂົາທັງສອງຈຶ່ງເປັນຜູ້ກຳຄວາມລັບລາຍລະອຽດສຳຄັນບາງອັນ ກ່ຽວກັບການປະຕິບັດງານອັນເລິກລັບຂອງມິເຕຍກິນກັບພັກພວກ.

ເມື່ອມິເຕຍກິນ ມາຮອດ, ນິຄົມຂອງພວກເຮົາຈຶ່ງມີສະມາຊິກອັນທະພານຕື່ມຂຶ້ນ ແລະທາງດ້ານຄຸນນະພາບກໍດີຂຶ້ນນຳ.

ມັນຜູ້ນີ້ເປັນຂະໂມຍຊັ້ນສູງ, ມີແນ່, ສະຫລາວສະຫລາດກ້າຫານ ແລະໄດ້ຮັບຄວາມສຳເລັດເປັນຢ່າງດີ. ແຕ່ເຖິງແນວໃດກໍດີ

ມັນຍັງເປັນຄົນມີສະເຫນ່ຫ໌ດຶງດູດໃຈຜູ້ອື່ນທີ່ສຸດ. ມັນມີອາຍຸປະມານ ໑໗ ປີ ຫລືອາດຈະຫລາຍກວ່ານີ້ຫນ້ອຍຫນໍ່ງ.

ບົນໃບຫນ້າຂອງມັນມີ "ສັນຍາລັກພິເສດ" ສະເພາະຕົວຂອງມັນຢ່າງຫນໍ່ງ ຄື້ອຂາວໃສເປັນຢຸ່ມຫນາປະກອບດ້ວຍຂົນເສັ້ນຂາວປານຫິມະ. ມັນເຄີຍເວົ້າວ່າ ຈຸດພິເສດອັນນີ້ ເປັນອຸປະສັກຕໍ່ຄວາມສໍາເລັດໃນການລ້ຽງມ້ືຂອງມັນ, ເຖິງປານນັ້ນ ມັນກໍບໍ່ເຄີຍຄິດເຫັນວ່າຈະເຮັດວຽກງານອື່ນໃດເປັນ. ໃນຕອນແລງມ້ືທໍາອິດທີ່ມັນມາຮອດນິຄົມ, ມັນໄດ້ມາລົມກັບຂ້າພະເຈົ້າຢ່າງປອດໂປ່ງເປັນອິດສະຫລະທີ່ສຸດ ແລະກໍທັງເວົ້າແບບເປັນກັນເອງນໍາ.

-ພວກເດັກນ້ອຍເຂົາເວົ້າເຖິງເຈົ້າໃນແງ່ດີຫລາຍຢ່າງ, ອານໂຕນ ເຊມ້ືອໂນວ໌ດ.

-ຈ່ັງຊັ້ນຫວະ! ແລ້ວເປັນແນວໃດລະ?

-ກະດີ້ນແລ້ວ ກ້າວ່າພວກເຂົາຮັກແພງເຈົ້າ ສໍາລັບພວກເຂົາມັນກໍສະດວກງ່າຍດາຍຂ໊ຶ້ນ.

-ຄັນເປັນຈ່ັງຊັ້ນ ໂຕກໍຄວນຮັກເຮົາຄືກັນ.

-ຂ້ອຍຫວະ? ຂ້ອຍບໍ່ຄືກັບພວກເຂົາ ຂ້ອຍຈະບໍ່ຢູ່ໃນນິຄົມນ້ີດົນດອກ.

-ເປັນຫຍັງ?

-ແລ້ວຂ້ອຍຊິຢູ່ຕໍ່ໄປເຮັດຫຍັງ? ເຖິງຢ່າງໃດຂ້ອຍກໍຄົງຈະລັກຢູ່ຕໍ່ໄປອີກ.

-ອັນນ້ີມັນແມ່ນນິໄສເສຍທີ່ອາດຕັດກ້ໍມໄດ້.

-ຂ້ອຍຮູ້ຢູ່ ແຕ່ຂ້ອຍຄິດວ່າມັນບໍ່ແມ່ນ ແນວຊົ່ວຮ້າຍພໍ້ກ່ວາ ຫມູ່.

-ນິເຕຍກິນ ນ້ຳເວົ້າຄ່ຳຫຼືນີ້ແລ້ວ.

-ບໍ່ເດ໊, ການລັກແມ່ນເກມຫລິ້ນທີ່ມ່ວນແລະຫນ້າສົນໃຈຢ່າງ ຫນຶ່ງ ພຽງແຕ່ໃຫ້ຮູ້ວ່າ ຄວນລົງມືຈັ່ງໃດທ່ໍນັ້ນລະ ແລ້ວຕ່ໍມາ ກໍ ຕ້ອງຮູ້ວ່າຄວນລັກໃຜ. ໃນໂລກນີ້ມີຄົນຂີ້ດຽດຢູ່ເຕັມໄປຫມົດ ແລະ ພວກເຂົາກໍເກີດມາ ເພື່ອສາເຫດນີ້ ສ່ວນວ່າອີກພວກຫນຶ່ງນັ້ນຄັນ ວ່າໄປລັກໄປຫລອຍເຂົາກໍແມ່ນເປັນໂທດເປັນກໍາແທ້.

-ກ່ຽວກັບເລື່ອງນີ້ນ້ຳເວົ້າມີເຫດຜົນຢູ່ ນິເຕຍກິນເອີ້ຍ, -ຂ້າ ພະເຈົ້າເວົ້າຂຶ້ນ, -ແຕ່ລະຫວ່າງຜູ້ລັກກັບຜູ້ຖືກລັກ (ຂີ້ກະໂຍກັບ ເຈົ້າຊັບ) ນັ້ນຕ່າງກໍເປັນຜູ້ໄດ້ຮັບອະນຸສົນກໍາເທົ່າໆກັນ.

-ອະນຸສົນກໍາອັນໃດ?

-ແມ່ນອັນນີ້ແລ້ວ: ໂຕລ້ຶ້ລັກ ແລ້ວກໍລືມເລື່ອງອອກແຮງງານ ໄປ ໂຕເຫັນວ່າທຸກສິ່ງທຸກຢ່າງງ່າຍດາຍໄປຫມົດ. ຕ່ໍໄປ ກໍຈະຕິດ ເຫລ້ົ້າ ຈາກນັ້ນກໍຫມົດອະນາຄົດ ກາຍເປັນຄົນສັງຄົມໂສກົ້ມ. ບໍ່ ດົນກໍໄປຢູ່ຄຸກຈາກນັ້ນກັນບໍ່ຢາກເວົ້າ...

-ເຂົ້າຄຸກ ກໍຍັງເປັນຄົນຢູ່ເດ້. ພວກທີ່ຢູ່ນອກຄຸກຢູ່ຢ່າງມີເສລີ ພາບນັ້ນ ກໍມີຫລາຍຄົນທີ່ດໍາລົງຊີວິດຕ້ອຍຕ່ໍາກ່ວາພວກຢູ່ໃນຄຸກຊ້ຳ ເລື່ອງນີ້ເວົ້ຍາກ.

-ໂຕເຄີຍໄດ້ຍິນ ເລື່ອງການປະຕິວັດເດືອນຕຸລາຢູ່ເບາະ?

-ຟາກແຕ່ໄດ້ຍິນ, ຂ້ອຍຍັງຮອດໄດ້ ເຂົ້າຮ່ວມສູ້ຮົບຢູ່ໃນກອງ ທັບແດງພຸ້ນນ່ະ.

-ຈັ່ງຊັ້ນໂຕ ກໍຄິງຊິຮູ້ແລ້ວຕິວ່າ ບັດນີ້ຜູ້ຄົນທ້າງຫລາຍຈະບໍ່ດຳລົງຊີວິດຄືກັບພວກຢູ່ໃນຄຸກອີກແລ້ວ.

-ອັນນີ້ກໍຍັງຕ້ອງເບິ່ງກັນຕໍ່ໄປອີກ, -ນິເຕຍກົມເວົ້າແບບໃຊ້ຄວາມຄຶດ, -ຍັງມີຄົນຊື່ອຊ້າເຕັມໄປຫມົດ ພວກເຂົາມີທາງໄປສະເພາະຕົນເອງແລ້ວ ບໍ່ແບບໃດກໍແບບຫນຶ່ງ ເບິ່ງເອົາເທາະແມ້ຜູ້ຄົນຢູ່ອ້ອມຮອບນິຄົມນີ້ເປັນແນວໃດ...ໂທ້..!

ເມື່ອຂ້າພະເຈົ້າທັບມ້າງກຸ່ມຫລົ້ນໄພ ຢູ່ໃນນິຄົມໄດ້ນັ້ນ ນິເຕຍກົມປະຕິເສດບໍ່ຍອມບອກທີ່ມາຂອງເງິນ ເຊິ່ງມັນເຊື່ອງມ້ຽນໄວ້ໃນຫມວກ.

-ມຶງລັກມາຫວະ?

-ເຈົ້າເວົ້າເປັນຕາຫົວຫລາຍ, ອານໂຕນ ເຊມີໂນວິດ!... ແນ່ນອນວ່າຂ້ອຍບໍ່ໄດ້ຊື້ໄດ້ຫາມັນມາ!... ໃນໂລກນີ້ຍັງມີຄົນໂງ່ຈ້າຫລາຍຢູ່, ເງິນຈຳນວນນີ້ກໍແມ່ນພວກໂງ່ພວກເຊື້ຫມູ່ນັ້ນລະສະສົມໄວ້ ແລ້ວພວກເຂົາຍັງມີຫນ້າໄປຫມອບຄານມອບມັນໃຫ້ພວກຂີ້ສູດທ້ອງໂຊ່ນ ແລ້ວຂ້ອຍຊິຕ້ອງຫ່ວງຫ້າຫ່ວງສິບຫຍັງອີກ? ທາງທີ່ດີກໍຄ້ວາເອົາມາໄວ້ໃນກົງຂ້ອຍກ່ອນລະບໍ, ຈັ່ງຊັ້ນລະ ຂ້ອຍກໍເລີຍເອົາມາ, ຍາກແຕ່ວ່າອັນຢູ່ນິຄົມຂອງເຈົ້າຫນີ້ຫາບ່ອນ ຊິມ້ຽນກໍບໍ່ໄດ້, ຂ້ອຍບໍ່ຄຶດຈັກຫນ້ອຍວ່າເຈົ້າຊິຄົ້ນແບບນີ້.

-ເອົາລະ, ເອົາລະ, ຊິຍຶດເງິນນີ້ໄວ້ເປັນຂອງນິຄົມ, ແລ້ວກໍຈະບັນທຶກຄະດີ ແລະແກ້ໄຂເລື່ອງນີ້ນຳກັນໃນຂັ້ນຕໍ່ໄປ, ແຕ່ດຽວນີ້ກູບໍ່ມີເວລາເວົ້າກັບມຶງແລ້ວ.

ຂ້າພະເຈົ້າເວົ້າຮອດເລື່ອງລັກກັບພວກເດັກນ້ອຍ:

- ກູຂໍຫ້າມການຫລິ້ນໄພ່ຢ່າງເດັດຂາດ, ພວກສູບໍ່ຕ້ອງຫລິ້ນອີກ, ເຮັດແບບນີ້ມັນເທົ່າກັບລັກຂອງຫມູ່ກັນເອງ.

- ຢ່າໃຫ້ພວກນັ້ນຫລິ້ນນຳຊັ້ນຕ່ວາ!

- ພວກເຂົາຫລິ້ນຍ້ອນພວກເຂົາໂງ່ພວກເຂົາຈ້າ. ມີຫລາຍຄົນທີ ຍອມອົດນ້ຳຕານເຂົ້າຈີ. ຍ້ອນເລື່ອງນີ້ແລ້ວທີ ອອບຊາເຮັນໂກ ຈຶ່ງໄດ້ຫນີຈາກນິຄົມ. ແລ້ວເບິ່ງດູບັດນີ້ມັນເປັນແນວໃດ... ຮ້ອງໄຫ້ເລາະໄປຕາມກະຫນົນ ມັນກຳລັງຕົກຢູ່ໃນຂຸມໂຈນກາງຕະຫລາດ.

- ເອີ...ອັນເຮັດກັບຫມໍ ອອບຊາເຮັນໂກ ຫັ້ນເປັນຫນ້າຂີ້ດງດແທ້! - ມິເຕຍກິນ ເວົ້າຂຶ້ນ.

ຂ້າພະເຈົ້າເວົ້າຕໍ່ວ່າ:

- ສະພາບມັນເປັນແນວນີ້, ປາກົດວ່າໃນຫມູ່ພວກສູນີ້ ບໍ່ມີໃຜເລີຍປົກປ້ອງຜູ້ອ່ອນແອກວ່າ, ຈ່ຳຊັ້ນກູຈຶ່ງຕ້ອງເຮັດຫນ້າທີ່ນີ້-ກູຈະບໍ່ຍອມໃຫ້ມີເດັກນ້ອຍອົດຫີວ ແລະທຳລາຍສຸຂະພາບຂອງໂຕເອງຍ້ອນຜີຫ່າໃບໄພ້ເຫລົ່ານີ້ເປັນຕົ້ນເຫດ. ກູຈະບໍ່ຍອມເດັດຂາດ, ບັດນີ້ແມ່ນທີພວກສູທີ່ຈະເລືອກເອົາທາງໃດທາງຫນຶ່ງ. ກູນີ້ບໍ່ມັກຈັກຄົ້ເລື່ອງຄົນຫໍນອນພວກສູນີ້ນ໊ະ ແຕ່ວ່າຫລັງຈາກໄປພົ້ຫມໍອອບຊາເຮັນໂກ ເລາະຍ່າງທ້ຳຮ້ອງໄຫ້ຢູ່ໃນເມືອງມາ ແລະມັນກຳລັງຈະເສຍຄົນຈ່ຳຊັ້ນຈຶ່ງຕັດສິນໃຈເດັດດ່ຽວວ່າຊິບໍ່ອ່ອນນ້ຳກັບພວກສູອີກຕໍ່ໄປ. ແຕ່ຖ້າພວກສູເຂົ້າໃຈ... ຍິນດີຕ້ອນຮັບກັບມາ ຖ້າພວກສູບໍ່ເຂົ້າໃຈ... ຍິນດີຕ້ອນຮັບເຊັ່ນກັນ ແຕ່ກ່ອນອື່ນໝົດ ກູຂໍຖາມພວກສູວ່າ ພວກສູຈະຍອມຮັບປາກໄດ້ບໍ? ກູຢ້ານແຕ່ວ່າ...ຄຳສັນຍາຂອງພວກສູມັນຊິເປັນຄຳເວົ້າລ້ຳໆນັ້ນລະ, ບູຮຸນ ເຄີຍໃຫ້ສັນຍາແລ້ວ...

ບູຮູນ ໂດດອອກມາທາງຫນ້າທັນທີ, ມັນຮ້ອງວ່າ:

-ບໍ່ແມ່ນເດ້ີ, ອານໂຕນ ເຊມີອໂນວ໊ດ, ເຈົ້າບໍ່ລັກອາຍແດ່ ຫວະ ທີ່ເວົ້າຄວາມເທັດອອກມາຈັ່ງຊີ້, ຄັນເຈົ້າເອງກໍຍັງຕິວະຈັ່ງຊີ້ ແລ້ວ...ພວກເຮົາເດ້... ຂ້ອຍບໍ່ເຄີຍໃຫ້ຄຳຫມັ້ນສັນຍາຫຍັງຫມົດ ກ່ຽວກັບໄພ້.

-ຂໍໂທດ! ນຶ່ງເວົ້າຖືກແລ້ວ ກູຜິດເອງ ທີ່ບໍ່ໄດ້ຖາມນຶ່ງກ່ອນ ກ່ຽວກັບເລື່ອງນີ້ ນັບຫັ້ງເລື່ອງກິນເຫລົ້າວິດການຳ.

-ຂ້ອຍບໍ່ໄດ້ກິນເດ້ີ.

-ດີແລ້ວ, ເອົາລະຢ່າເວົ້າມາອີກເລີຍ, ຊັ້ນບາດນ້ີພວກເຮົາຊິ ເຮັດແນວໃດກັນ?

ກາຣາບານິບ ກ້າວອອກມາຍັງແກວທີຫນຶ່ງ ທ່າທີຂອງຫມໍແຈ່ມ ໃສ ສະຫງ່າງາມບໍ່ຫວັ່ນໄຫວຄືຕາມປົກກະຕິ ຫມໍຢຸດເອົາທ່າປຶດ ຫນຶ່ງ ເບິ່ງຄ້າຍຄືວ່ປ່າໂຕເຂັ້ມແຂງຊິ່ງພະລັງ ທີ່ໄດ້ສະສົມເທ໊ອ ແຮງຫັ້ງຫມົດໄວ້ພ່ຽງພໍແລ້ວ:

-ພວກຫມູ່ເອ໊ີຍ ມັນຈະແຈ້ງແລ້ວລະ. ການຕົ້ມຫມູ່ດ່ວນ ໃນວິງໄພ້ຈັ່ງຊ້ີບໍ່ຄວນເຮັດອີກແລ້ວພວກໂຕອາດຊິຄ່ວນໃຫ້ເຮົາ ແຕ່ ເຮົາຂໍເປັນຜູ້ຫນຶ່ງທີ່ຄັດຄ້ານການຫລົ້ນໄພ້ ຄືພວກໂຕຮູ້ນັ້ນລະວ່າ ເຮົາເອງບໍ່ເຄີຍກ໋ກ່ວນໃຜຈັກເທ໊ອ ແຕ່ເລື່ອງຕົ້ມກັນຫນ້ີ ເຮົາຈະບໍ່ ຍືນຕາເບິ່ງລ້ຳໆຕໍ່ໄປອີກແລ້ວເຮົາຊິຈັດການກັບທຸກຄົນທີ່ເຮົາຈັບໄດ້ ວ່າຫລົ້ນໄພ້, ເມ໊ືອເຮົາເຫັນ ອອບຊາເຮັນໂກ ຫນີໄປນັ້ນ ເຮົາຄຶດເອົາເອງວ່າ: ບໍ່ຕ່າງຫຍັງກັບສິ່ງມັນໄປປ່າຊ້າ, ບັກອັນນ້ີ໊ນ໊ະ

ໃຜໆກໍຮູ້ວ່າ ອອບຊາເຮັນໂກບໍ່ມີປັນຍາ ພໍຊິໄປຫລອຍອີ່ຫຍັງໃຜ ໄດ້ ແມ່ນຫມໍບູຮູນກັບຣາຍອິດຊາແທ້ໆນ່າຕົ້ມມັນຈົນຫລ້ອນ. ເຮົາ ຈົ່ງຄິດແນວນີ້ ໃຫ້ພວກເຂົາສອງຄົນນີ້ລະໄປນໍາມັນຄືນມາ ຖ້າບໍ່ໄດ້ ໂຕມັນມາ ພວກເຂົາເອງກໍບໍ່ຄວນກັບຄືນມາຄືກັນ!

ບູຮູນ ເຫັນດີນໍາຢ່າງເຫັນໄດ້ຄັກ ແຕ່ຫມໍເວົ້າຕື່ມວ່າ:

-ແຕ່ເລື່ອງຫຍັງ ຈົ່ງຊິຕ້ອງເອົາ ຣາຍອິດຊາ ໄປນໍາລະ? ເຮົາ ໄປນໍາຫາມັນຜູ້ດຽວກໍໄດ້.

ພວກເດັກນ້ອຍຫົວແຊວຂຶ້ນພ້ອມກັນ ຂໍ້ຕົກລົງດັ່ງກ່າວ ເປັນ ທີ່ພໍອົກພໍໃຈທຸກຄົນ ບູຮູນເກັບຍຶດເອົາໄພ້ຈາກທຸກຄົນດ້ວຍມືຂອງ ມັນເອງ ແລ້ວໂຍນກົ້ມໃສ່ຄຸ, ກາລິນາ ອີວາໂນວິດ ຮີບໂຮມເອົາ ນໍ້າຕານທັງຫມົດໄວ້ຢ່າງຍິນດີ:

-ຂອບໃຈສູເດັກນ້ອຍ, ພວກສູປະຍັດໄດ້ດີຫລາຍ.

ມີເຕຍກິນ ຍ່າງນໍາຂ້າພະເຈົ້າອອກມານອກຫໍພັກ.

-ຂ້ອຍຄວນໄປໄດ້ແລ້ວແມ່ນບໍ?

ຂ້າພະເຈົ້າຕອບມັນຢ່າງເສົ້າແສບໃນຫົວໃຈວ່າ:

-ກະບໍ່ຈໍາເປັນ...ເປັນຫຍັງ? ມຶງຢູ່ຕໍ່ອີກກໍໄດ້.

-ແຕ່ເຖິງຢ່າງໃດ ຂ້ອຍກໍຄິງຈະລັກຕໍ່ຢູ.

-ໂຍ້ວ! ມຶງຢາກລັກກໍລັກໄປເທາະແມ້, ຊິໄປຕາຍທາງໃດກໍ ເຊີນໂລດ ບໍ່ແມ່ນກູຊິໄປຕິດຄຸກແທນມຶງດອກເດີ້.

ມັນຕົກໃຈເລີຍເປີດຫນີໃນທັນທີ.

ເຊົ້າມື້ຕໍ່ມາ ບູຮູນອອກເດີນທາງໄປໃນເມືອງ ເພື່ອຊອກຫາ ອອບຊາເຮັນໂກ ພວກເດັກນ້ອຍ ແກ່ເອົາ ຣາຍອິດຊາ ໄປນໍາຫລັງ

ມັນ ກາຣາບານິບ ເຮັດສ່ງຄ້າຍມ້າຮ້ອງດັງກ້ອງໄປທົ່ວນິຄົມ ເອົາມື ຟາດບ່າໄລ່ ບູຮຸນ ແລ້ວເວົ້າວ່າ:

-ເຮ້ີຍ! ອັດສະວິນ ແຫ່ງອຸກຣາວິນ ຍ້ງຢູ່ເວ້ີຍ!

ຊາໂດຣອບ ອອກມາຢືນເບ່ິງຢູ່ປາກປະຕູໂຮງຊ່າງຕີເຫລັກ ທ້ັງ ຫ້ວຈ້ນເຫ້ັນແຂ້ວຫມ້ົດ ມ.ຄ ເຫລ້ັ້ມ ມັນຫ້ັນມາເວ້ົ້າກ້ັບຂ້ົ້າພະເຈ້ົ້າ ດ້ວຍຄວ້ົ້ານຈ້ົ້ງໃຈເຊ້ົ້ືອຫ້ັ້ນວ່າ:

-ພວກຂ້ົ້ສຸດ...ແຕ່ວ່ານ້ົ້ພ້ົ້ຢູ່ກ້ັບພວກເຂ້ົ້ານ້ົ້ຢູ່ດ້ວກເນ້ົ້ານ.

-ເອ້ົ້ືແລ້ວມ້ົ້ງຫ້ັ້ນເດ້ ມ້ົ້ງເປ້ັ້ນຫ້ັ້ຍ? -ກາຣາບານິບຮ້ອງກ້ານ ຢ່ານ້ົ້ໃນໃຈ.

-ເຮ້ົ້ານ້ົ້ວ, ແຕ່ກ່ອນເປ້ັ້ນນ້ົ້ກ້ັດແຈ້ະເຮ້ົ້ືອນຄ້ົ້ນໂດຍສ້ົ້ືບເຊ້ົ້ືອ ມ້ົ້ານ້ົ້ຈ້ົ້ານ ປູ່ຢ່ານ້ົ້ານ້ົ້ວດ. ແຕ່ດ້ວນ້ົ້ເປ້ັ້ນຊ່ານ້ົ້ຕ້ົ້ເຫ້ົ້ລ້ົ້ກແຫ່ານ້ົ້ຄ້ົ້ນກ້ົ້ວກ ກ້ົ້, ທ້ົ້ານ້ົ້ວ້ົ້ານ້ົ້ເລ້ົ້ກລ້ົ້ງ ຊ້ົ້ານ້ົ້ໂດຣອບ ຂ້ົ້ລ້ົ້ານ້ົ້ງ້ານ້ົ້ຕ້ົ້ວກ້ັບສ້ົ້ະຫ້ົ້ານ້ົ້!

-ພ້ັ້ກໄດ້! ກ້ົ້ານ້ົ້ຣ້ົ້ານ້ົ້ນ້ົ້ ອ້ົ້ອກ້ົ້ານ້ົ້ຫ້ັ້ ທ້ົ້ານ້ົ້ຫ້ົ້ວ້ົ້ານ້ົ້ານ

ຈັກເທື່ອເທົ່ານັ້ນ ແຕ່ຍັງບໍ່ເຄີຍຄຶດຈັກຫນ້ອຍວ່າ ພວກເຮົາກຳລັງ ສ້າງວິລະກຳຢ່າງຫນຶ່ງ ພວກເຮົາບໍ່ຄຶດເມຶອນີ້ເລີຍ ບໍ່ວ່າໃນຕອນຕັ້ງ ນິຄົມຂຶ້ນໃຫມ່ໆ ຫລືແມ່ນແຕ່ ເມຶ່ອທຳການສະເຫລີມສະຫລອງ ຄົບຮອບ ຊ ປີຂອງນິຄົມ.

ເມຶ່ອເວົ້າເຖິງ "ວິລະຊົນ" ບໍ່ແມ່ນແນໃສ່ແຕ່ສະເພາະພະນັກ ງານຂອງນິຄົມກັອກກິດອກ. ຢູ່ໃນສ່ວນເລິກຂອງຫົວໃຈນັ້ນ ພວກ ເຮົາຖຶຄຳນຶ້ສະເຫມຶອນສງຮງກ້ອງຢ່າງຫນຶ່ງ ເພຶ່ອຊຸ້ວານຈັນຍາ ທຳຂອງທຸກຜູ້ທຸກຄົນ ທີ່ເຮັດວງກຢູ່ໃນຄ້າຍຫລືນິຄົມເດັກນ້ອຍປະ ເພດດຽວກັບພວກເຮົາ.

ໃນປາງນັ້ນ ລັດທິວິລະຊົນກຳລັງຟັກຮ້ອນຢູ່ໃນຈິດໃຈຊາວໂຊ ວງດ ແລະການປະຕິວັດທົ່ວໆໄປ, ວງກງານຂອງພວກເຮົາເບົາບາງ ເກີນໄປ ເມຶ່ອເບິ່ງຜົນງານຕົວຈິງ ແລະຜົນສຳເລັດຂອງມັນ.

ພວກເຮົາເປັນຄົນທຳມະດາສາມັນ ຄືກັບຄົນອຶ່ນໆ ມີຈຸດອ່ອນ ນາໆປະການເຕັມໄປຫມົດ ແລະຄວາມຈິງກໍມີຢູ່ວ່າ ພວກເຮົາບໍ່ຮູ້ ຈັກຮອດພາລະຫນ້າທຶ່ຂອງຕົນ. ຕະຫລອດມຶ້ຕະຫລອດເວັນທຶ່ພວກ ເຮົາເຮັດວງກນັ້ນ ມັນເຕັມໄປດ້ວຍຄວາມຜຶດພາດ, ການກະທຳອັນ ບໍ່ທ່ຽງແທ້ແນ່ນອນ, ມີແນວຄຶດສັບສົນ, ແມ່ນທ່ານກາງເມກ ຫມອກອັນສຸດສັ້ງບໍ່ເປັນນັ້ນແລ້ວ ທຶ່ພວກເຮົາຄ່ອຍໆຫູແຈ້ງຕາໃສ ແນມເຫັນຂອບເຂດຊີວິດໃນແງ່ສຶກສາສາດຢູ່ໃນອະນາຄົດ.

ທຸກບາດກ້າວ ທຶ່ພວກເຮົາຍ້າຍໄປອາດຖຶກຕຳຫນິຕົງນຈາກ ທຸກໆດ້ານ ຕາບໃດທຶ່ພວກເຮົາຫາກຍ່າງໄປຢ່າງບໍ່ມີເປົ້າຫມາຍ. ຢູ່ ໃນວງກງານຂອງພວກເຮົານັ້ນ ທຸກຢ່າງລ້ວນແຕ່ເປັນຕາຄັດຄ້ານໂຕ

ກຸ່ງຄືນທ້ານັ້ນ ແລະເມື່ອໃດຫາກມີການອະພິປາຍກັນ, ມັນກໍ່ຍິ່ງ ຮ້າຍແຮງກວ່າເກົ່າຊ້ຳ, ບໍ່ມີແສງສະຫວ່າງໃດໆ ພຸ່ງພົ້ນອອກຈາກ ການອະພິປາຍຂອງພວກເຮົາ.

ມີຢູ່ສອງຈຸດເທົ່ານັ້ນ ທີ່ພວກເຮົາແນ່ໃຈຕະຫລອດມານັ້ນຄ້ອນ ທີຫນຶ່ງ ພວກເຮົາຕັດສິນໃຈເດັດດ່ຽວແລ້ວວ່າເປັນຕາຍແນວໃດ ກໍ ຈະບໍ່ຍອມປະກົມວຽກງານນີ້ໄປ ຈະເຮັດຕໍ່ໄປຈົນເຖິງວາລະສຸດທ້າຍ ຂອງມັນເຖິງວ່າມັນຈະຂີ້ເຮ້ຂີ້ຮ້າຍປານໃດກໍຕາມ ອັນທີສອງແມ່ນຊີ ວິດປະຈຳວັນຂອງພວກເຮົາເອງ ຊີວິດຂອງພວກເຮົາແລະຂອງຜູ້ອື່ນໆ ທີ່ຢູ່ອ້ອມຂ້າງນິຄົມ. ພວກເຮົາຮອດບໍ້ກ້າຮອດແມ່ນແຕ່ເອົາຄືນນ້ອຍ ແຕະຕ້ອງພວກເດັກນ້ອຍ. ກິດລະບຽບຂອງພວກເຮົາມີຢູ່ວ່າ ພວກ ຄູຢູ່ເວນພາກກາງເວັ້ນຕ້ອງກິນເຂົ້າກັບພວກນັກຮຽນ. ແຕ່ ອິວານ ອີວາໂນວິດກັບ ເມຍຂອງລາວປະກາດຢ່າງເດັດດ່ຽວວ່າ ພວກເຂົາ ຈະບໍ່ຍອມກິນເຂົ້າຮ່ວມໂຕະກັບພວກເດັກນ້ອຍ ຍ້ອນວ່າພວກເຂົາ ບໍ່ສາມາດອົດທົນເບິ່ງຄວາມຂີ້ດຽດເປື້ອນເປິຂອງພວກນີ້ໄດ້.

ຂ້າພະເຈົ້າບອກພວກເຂົາວ່າ:

- ແລ້ວຈຶ່ງວ່າກັນ.

ເມື່ອລາວຢູ່ຜຽນຍາມເລາະຫໍພັກໃນກາງຄືນ, ອິວານ ອີວາໂນ ວິດ ກໍບໍ່ນັ່ງເທິງຕຽງພວກເດັກນ້ອຍຈັກເທື່ອ, ຢູ່ໃນຫ້ອງນັ້ນ ບໍ່ມີ ວັດຖຸອື່ນໃດ. ຈັ່ງຊັ້ນລາວຈຶ່ງຕ້ອງຢືນຢູ່ຫນ້ດຄືນ, ລາວກັບເມຍເວົ້າ ກັບຂ້າພະເຈົ້າວ່າ:

- ເຮັດແນວໃດເຈົ້າຈຶ່ງນັ່ງຕຽງນີ້ລົງເກາະ? ມີແຕ່ເທົ້າຕັ້ນໄປ ຫນ້ດ.

ຂ້າພະເຈົ້າບອກພວກເຂົາວ່າ:

-ບໍ່ເປັນຫຍັງດອກ, ຈັກຫນ່ອຍທຸກຢ່າງຫາກຈະຮຽບຮ້ອຍເອງ, ພວກເຮົາຈະປາບເຫົ້າຫລືເຮັດວິທີໃດວິທີຫນຶ່ງ...

ສາມເດືອນຕໍ່ມາ, ອິວານ ອິວາໂນວິດ ບໍ່ພຽງແຕ່ກິນເຂົ້າຮ່ວມໂຕະກັບພວກເດັກນ້ອຍເທົ່ານັ້ນ ແຕ່ລາວຍັງກົ້ມນິໄສ ເອົາບ່ວງໄຊ້ສ່ວນຕົວຂອງລາວມານຳພ້ອມ, ລາວໄຊ້ບ່ວງໄມ້ປະເພດທຳມະດາສາມັນ ເຊິ່ງທາງເຮືອນຄົວປະກອບໃສ່ໂຕະອາຫານ ແລະພໍໃຈທີ່ຈະໄຊ້ນ້ອມືເຊັດບ່ວງນັ້ນເພື່ອຄວາມສະບາຍໃຈ.

ແລະໃນຕອນຄ່ຳ, ຢູ່ຫໍພັກທ່ານກາງວິງລ້ອມນັ່ນນອງຂອງພວກເດັກນ້ອຍ, ອິວານ ອິວາໂນວິດ ກໍນັ່ງຢູ່ເທິງຕຽງເພື່ອຫລົ້ນຫມາກ "ຂະໂມຍກັບໂຈດ". ການຫລົ້ນນີ້ມີກົດເກນດັ່ງຕໍ່ໄປນີ້: ທຳອິດຕ້ອງຍາຍບັດ ເຊິ່ງຂຽນຄຳສັບ "ຂະໂມຍ", "ໂຈດ", "ຈ່າສານ", "ເພັດຊະຄາດ" ແລະອື່ນໆໃສ່. ຜູ້ໃດໄດ້ຮັບບັດທີ່ຂຽນວ່າ ໂຈດ ຈະເອົາແພຍາວໆມາບິດແຫນ້ນຈົນເປັນແກວ ແລ້ວພະຍາຍາມສືບຖາມວ່າແມ່ນໃຜເປັນຂະໂມຍ. ຫມົດທຸກຄົນແບມືໃຫ້ເຂົາ ແລ້ວເຂົາກໍຈະເລືອກຕີ ຜູ້ທີ່ເຂົາຄຶດວ່າເປັນຂະໂມຍ ແຕ່ສ່ວນຫລວງຫລາຍແລ້ວ ເຂົາມັກຟາດຖືກຜູ້ເປັນ "ຈ່າສານ" ຫລື "ຜູ້ສືບສວນຄະດີ" ທຳມະດາພັ້ນ ແລ້ວຕົວລະຄອນຊົ່ວກຽດຜູ້ຖືກຫມິ່ນປະຫມາດແບບນີ້ກໍຈະຕີຟາດໝົດທີ່ຜູ້ຫລົ້ງຜິດແບຽດໃຫ້ຕາມຈຳນວນທີ່ຕົກລົ້ງ ເປັນການປັບໃຫມ່ແກ້ຂໍ້ຕູ່ຫາຍັນນີ້. ຖ້າໃນຮອບຕໍ່ມາ ຖ້າໂຈດທວາຍຖືກ ບົດບາດທໍລະມານໃຈຂອງເຂົາກໍເປັນອັນວ່າຫມົດໄປ ແລະແມ່ນຜຽນຂອງຫມໍຂະໂມຍ. ຈ່າສານເປັນຜູ້ປະກາດໂທດຂອງມັນແລ້ວ

ຄືຕີແຮງໆຈັກ ๕ ຫລື ๑๐ ບາດ, ຫລືວ່າຕີຈັກ ๕ ບາດແຕ່ບໍ່ແຮງ ປານໃດ. ທ້າວເພັດຊະຄາດເອົາຜ້າແພທີ່ບິດກ້ອໄວ້ແກ່ນໆແລ້ວນັ້ນ ມາໃຊ້ເປັນເຄື່ອງມືລົງໂທດ.

ໃນເມື່ອວ່າບົດບາດຕ່າງໆຫມູນວຽນປ່ຽນກັນໄປເລື້ອຍໆ ເຊັ່ນ ວ່າ ຫລັງຈາກເປັນຂະໂມຍແລ້ວ ໃນຮອບຕໍ່ໄປຊ້ຳໄດ້ເປັນຈ່າສານ ຫລື ເພັດຊະຄາດ ຈັ່ງຊັ້ນຄວາມຂົ້ນອົກຂົ້ນໃຈໃນການຫລິ້ນອັນຕົ້ນ ຕໍ່ຈົ່ງແມ່ນການລົງໂທດທໍລະມານ ແລະແກ້ແຄ້ນກັນນີ້ເອງ. ເມື່ອ ໃດຈ່າສານຜູ້ເຂັ້ມງວດຫລືເພັດຊະຄາດຜູ້ໂຫດຫ້ຽມຕົກຜຽນມາເປັນ ຂະໂມຍຫລືຕຳຫລວດ ຫມໍຈະໄດ້ຮັບການຕອບແທນຢ່າງຫນັກ ຫນ່ວງຈາກຈ່າສານ ຫລືເພັດຊະຄາດທີ່ກຳລັງຮັບຫນ້າທີ່ນັ້ນຢູ່, ແລະ ເຮັດໃຫ້ພວກກ່ອນ ສຳນຶກຄືນໄດ້ວ່າ ພວກເຂົາເຄີຍຖືກກະທຳແບບ ໃດມາກ່ອນແລ້ວ.

ເອົາເຕີຣິນາ ກຣິກໍເຮັບນາ ກັບ ລິດາ ເປໂຕຣິບນາ ກໍມາ ຫລິ້ນເກມນີ້ຄືກັນ ແຕ່ພວກເດັກນ້ອຍຜູ້ຊາຍໄດ້ສະແດງຄວາມເປັນ ສຸພາບບຸລຸດຕໍ່ພວກນາງ: ຖ້າຫາກວ່ານາງໃດນາງຫນຶ່ງຖືກຈັບໄດ້ໃນ ຖານະວ່າເປັນຂະໂມຍ ພວກເຂົາກໍປະກາດໂທດຊະນິດເບົາບາງກ່ວາ ຫມູ່ຫມົດ, ທ້າວເພັດຊະຄາດກໍສະແດງທ່າທີນຸ່ມນວນທີ່ສຸດໃນໂລກ ຕໍ່ພວກນາງ, ເຂົາພຽງແຕ່ເອົາແພລູບຝ່າມືອ່ອນນຸ້ມຂອງພວກນາງ ຄ່ອຍໆເທົ່ານັ້ນ.

ເມື່ອຂ້າພະເຈົ້າຫລິ້ນນຳພວກເຂົາ ພວກເດັກນ້ອຍຈະເຮັດທຸກ ຢ່າງ ເພື່ອທົດສອບຄວາມອົດທົນແລະຄວາມເຂັ້ມແຂງຂອງຂ້າພະ ເຈົ້າ ຈັ່ງຊັ້ນຂ້າພະເຈົ້າຈົ່ງບໍ່ມີທາງເລືອກຢ່າງອື່ນນອກຈາກສູ້ຫນ້າ

ກັບມັນ. ດັ່ງນັ້ນເມື່ອຂ້າພະເຈົ້າເປັນ "ຈ່າສານ" ຈຶ່ງຕັດສິນໃສ່ໂທດ ຂ້ຽະໂມຍຊະນິດທີ່ວ່າແມ່ນແຕ່ຜູ້ເປັນເພັດຊະຄາດເອງ ກໍຍັງຕັບລົບ ໄປ, ແລະເມື່ອໃດຂ້າພະເຈົ້າ ມີຫນ້າທີ່ເປັນຜູ້ລົງມືປະຕິບັດໂທດນັ້ນ ຂ້າພະເຈົ້າກໍເຮັດຈົນຜູ້ຮັບເຄາະຍອມເສຍກຽດຫລົ້ຽຮ້ອງອອກມາວ່າ:

-ອານໂຕນ ເຊມີອໂນວິດ!... ໂພດໄປແລ້ວ!

ແຕ່ເມື່ອ ຂ້າພະເຈົ້າເປັນຜູ້ຮັບໂທດນັ້ນ ມັນກໍບໍ່ຫລຸດຍ່ອນກັນ ເລີຍຈັ່ງຊັ້ນ ເມື່ອກັບມາຫ້ອງນອນນັ້ນ ມືຊ້າຍຈຶ່ງໄຄ່ບວມໄປຫມົດ, ເພາະກົ້ກັນວ່າການປ່ຽນມືກໍເປັນເລື່ອງຫນ້າອັບອາຍເສຍກຽດ ແລະ ຂ້າພະເຈົ້າກໍຕ້ອງການມືຂວາໄວ້ຂຽນຫນັງສືແດ່.

ໃນຕອນທໍາອິດ ອີວານ ອີວາໂນວິດ ກໍເຮັດຄືກັບພວກແມ່ຍິງ, ພວກເດັກນ້ອຍກໍປະຕິບັດນໍາລາວຢ່າງຜ່ອນມື. ຂ້າພະເຈົ້າບອກກັບ ລາວໃນມື້ຫນຶ່ງວ່າ ວິທີການດັ່ງກ່າວບໍ່ຖືກຕ້ອງ: ພວກເດັກນ້ອຍ ຕ້ອງແອບສູ້ທົນແລະກ້າຫານພວກເຂົາຕ້ອງບໍ່ຢ້ານອັນຕະລາຍ ໂດຍ ສະເພາະຄວາມເຈັບປວດທາງດ້ານຮ່າງກາຍ. ເຂົາບໍ່ເຫັນດີນໍາຂ້າພະ ເຈົ້າ.

ຄໍ່ານັ້ນຫນຶ່ງ, ຂ້າພະເຈົ້າກັບເຂົາຫລົ້ນຢູ່ໃນວົງດຽວກັນ, ເທື່ອ ຫນຶ່ງຂ້າພະເຈົ້າເປັນຈ່າ ສານ ຈຶ່ງຄາດໂທດເຂົາດ້ວຍການຕີ ແຮງໆ ສິບສອງບາດ ແລະໃນຮອບຕໍ່ມາ ຂ້າພະເຈົ້າໄດ້ເປັນເພັດຊະຄາດ, ຂ້າ ພະເຈົ້າເອົາແພ້ວ໊ອແກ່ນໆຟາດມືເຂົາສຸດແຮງ ຢ່າງບໍ່ອ້ຽງກູນາ, ເຂົາ ໂມໂຫຂຶ້ນວິດໆ ແລະໃນຂັ້ນຕໍ່ມາຈຶ່ງແກ້ແຄ້ນຢ່າງສົມໃຈ. ສະມາ ຊິກຜູ້ຈົງຮັກພັກດີຂອງຂ້າພະເຈົ້າຄົນຫນຶ່ງບໍ່ສາມາດທົນເຫັນການກະ

ທຳແບບນີ້ຂອງ ອີວານ ອີວາໂນວິດ ຜ່ານໄປໂດຍບໍ່ມີການແກ້ຄືນ ໄດ້ ຈຶ່ງຈັດການຄືນຈິນເຂົ້າໄດ້ປ່ຽນມືໃຫ້ຕີ.

ມື້ຕໍ່ມາ ອີວານ ອີວາໂນວິດ ພະຍາຍາມຫລີກຫນີຈາກການ ຫລົ້ນແບບ "ປ່າເຖື່ອນ" ອັນນີ້, ແຕ່ຖືກພວກເດັກນ້ອຍຫົວຂວັນ ເລີຍຫນ້າອາຍ. ໃນໂອກາດຕໍ່ມາ ລາວຈຶ່ງສູ້ທົນກັບການທົດສອບ ປະເພດນີ້ຢ່າງຮັກສາສັກສີບໍ່ຜ່ອນຜັນ ເມື່ອໄດ້ເປັນຈ່າສານ, ບໍ່ ສະແດງຄວາມຍ້ານ ເມື່ອໄດ້ເປັນໂຈດຫລືຂະໂມຍ.

ສອງຜົວເມຍ ອິດຊິບິບ ຈົ່ມວ່າເລື້ອຍໆວ່າມີເຫົາຢູ່ໃນເຮືອນພັກ ຂອງພວກເຂົາເຈົ້າ, ຂ້າພະເຈົ້າບອກວ່າ:

-ຕ້ອງກຳຈັດເຫົາຢູ່ຫໍພັກເດັກນ້ອຍຟຸ້ນກ່ອນບໍ່ແມ່ນຢູ່ໃນຫ້ອງ ນອນນັ້ນອີກ...

ແລະແລ້ວພວກເຮົາກໍຕໍ່ສູ້ຢ່າງສຸດຂີດ. ດ້ວຍຄວາມພະຍາຍາມ ຢ່າງໃຫຍ່ຫລວງ ພວກເຮົາໄດ້ຮັບຜ້າປູບ່ອນປອກຫມອນ ๔ ຊຸດ ແລະເຄື່ອງນຸ່ງ ๑ ຊຸດ ສຳລັບນັກຮົບແຕ່ລະຄົນ. ເຄື່ອງນຸ່ງເຫລົ່ານີ້ຫຍິບຂຶ້ນຈາກເສດຜ້າຕ່ອນນ້ອຍ ແຕ່ມັນກໍຕົ້ມສະອາດຈົນບໍ່ມີ ແມງໄມ້ຊະນິດໃດສາມາດຫລົບລີ້ຢູ່ໄດ້ອີກແລ້ວ. ການກຳຈັດມັນໃຫ້ ຫມົດກ້ຽງນັ້ນບໍ່ອາດເຮັດໄດ້ໄວປານໃດ ຍ້ອນວ່າມີນັກຮົບມາຕື່ມ ໃຫມ່ເລື້ອຍໆ, ຍ້ອນໄດ້ຕິດຕໍ່ພົວພັນກັບຊາວນາແດ່ ແລະຍ້ອນສາ ເຫດອື່ນໆອີກນຳ.

ວຽກງານຕາມທາງການຂອງພວກຄູ ແບ່ງອອກເປັນຂະແຫນງ ການຄຶກການເວນຍາມໃນຕອນກາງເວັນ, ການອອກແຮງງານ ແລະ

ການເວນຍາມໃນຕອນກາງຄືນ. ນອກນີ້ ໃນຕອນເຊົ້າ ພວກຄູຍັງ
ຕ້ອງສອນຫນັງສືຢູ່ໂຮງຮຽນອີກ.

ການເວນຍາມໃນຕອນກາງເວັນນັ້ນຫນັກຫນ່ວງຫລາຍ, ມັນ
ເລີ່ມແຕ່ ๕ ໂມງເຊົ້າ ຈົນຮອດສວງກະແລ່ຕີເຂົ້ານອນ. ຜູ້ຮັບພາ
ລະນີ້ ຕ້ອງນຳພາການເຄື່ອນໄຫວທັງຫມົດໃນວັນນັ້ນ, ເປັນຜູ້ກວດ
ກາການຈ່າຍອາຫານ, ການອອກແຮງງານ, ເປັນກຳມະການຫ້າມ
ການປະທະ, ເປັນຜູ້ໄກ່ເກ່ຍຄູ່ຕໍ່ສູ້, ແກ້ໄຂບັນຫາກັບຜູ້ປະທ້ວງ,
ຄິດໄລ່ປະລິມານອາຫານ ແລະກວດກາເບິ່ງສາງນຳ ການລົມ ອີວາ
ໂນອິດ, ຕິດຕາມເບິ່ງການປ່ຽນຜ້າປູບ່ອນປອກຫມອນ ແລະຜົນ
ການປະຕິບັດງານນີ້. ວຽກງານຂອງຜູ້ນີ້ມີຫລາຍໆຈົນວ່າໃນຕົ້ນປີທີ
๔ ຂອງນິຄົມນັ້ນ, ພວກນັກຮຽນຮຸ່ນອ້າຍຈຶ່ງໄດ້ຮັບແຕ່ງຕັ້ງໃຫ້ເປັນ
ຜູ້ຊ່ອຍ, ພວກນີ້ມີຈຸດແຕກຕ່າງຫມູ່ຢູ່ບ່ອນວ່າ ພວກເຂົາມີຜ້າແພ
ແດງມັດແຂນເສື້ອ.

ຄູສອນຜູ້ຮັບພາລະໃນຕອນກາງເວັນ ພໍພຽງແຕ່ມີສ່ວນຮ່ວມ
ເຮັດວຽກໃດວຽກຫນຶ່ງໃນບັນດາວຽກຕ່າງໆເຫລົ່ານີ້ເທົ່ານັ້ນ, ຕາມ
ປົກກະຕິແລ້ວ ກໍແມ່ນເຮັດວຽກຢູ່ບ່ອນໃດທີ່ມັນເຕົ້າໂຮມນັກຮຽນ
ຫລາຍກ່ວາຫມູ່ ຫລືບ່ອນທີ່ມີນັກຮຽນມາໃຫມ່ຫລາຍ ຄູມີບົດບາດ
ປະກອບສ່ວນໃນວຽກງານຢ່າງແທ້ຈິງ, ຢູ່ໃນສະພາບເງື່ອນໄຂຂອງ
ພວກເຮົາ ເວລານັ້ນ ຄູກໍບໍ່ມີທາງເລືອກຢ່າງອື່ນເລີຍ. ຄູສອນເຮັດ
ວຽກຢູ່ໂຮງຊ່າງ, ຢູ່ບ່ອນຕັດໄມ້, ຢູ່ທົ່ງນາ, ຢູ່ສວນຫມາກໄມ້
ແລະທັງຮ່ວມສ້ອມແປງເຄຫາສະຖານໃຫມ່ນຳ.

ບໍ່ດົນວຽກງານໃນຕອນກາງຄືນ ກໍຫລຸກຜ່ອນລົງເກືອບກາຍເປັນ

ທຸງຮູບການຫນຶ່ງທໍາມະດາເພາະວ່າ ໃນຕອນຄ່ໍາ ຄູທຸກຄົນໄດ້ມາ
ເຕົ້າໂຮມກັນຢູ່ຫ້ອງນອນແລ້ວ ບໍ່ວ່າຈະແມ່ນນ້ໍຜົງນຂອງພວກເຂົາ
ຫລືບໍ່. ການເຮັດແນວນ້ີ ກໍບໍ່ແມ່ນວ່າພວກເຂົາເກ່ັງກ້າອາດ
ຫານແນວໃດດອກ, ມັນເປັນເພາະວ່າ ພວກເຮົາບໍ່ມີບ່ອນອ່ືນທ່ີຈະ
ໄປໄດ້ອີກແລ້ວເທ່ົານ້ັນເອງ. ຫລັງຈາກກິນນ້ໍຊາໃນຕອນແລງ
ແລ້ວ, ການຄ້າງແຮມຢູ່ໃນຫ້ອງພັກທ່ີແປນເປ່ົາໃນເວລາກາງຄືນ
ທ່ານກາງແສງຕະກຽງນ້ອຍໆນ້ັນ ບໍ່ເປັນຫນ້າອອນຊອນເລີຍກ່ົງກັນ
ຂ້ານກັບເກ່ືອບເປັນຕາຢ້ານພຸ້ນແລ້ວ, ສ່ວນວ່າຢູ່ຫ້ອງໃຫຍ່ກ້ວາງ
ຂວາງພຸ້ນຊ້ໍາມ່ືດວງຕາສ່ິດໃສໃບຫນ້າຊ່ືນບານຂອງພວກເດ້ກນ້ອຍ ລໍ
ຄອຍພວກເຮົາຢູ່ຢ່າງຈ່ິດຈ່ໍ, ພ້ອມດ້ວຍເລ່ືອງຕ່າງໆ ທ້ັງຕະຫລ່ົກ
ຫນ້າອັດສະຈັນ, ເລ່ືອງແທ້ໆ ຄໍາກາມຣ້ອຍແປດພັນແນວກ່ໍ່ງກັບ
ເຫດການປັດຈຸບັນ, ບັນຫາປັດຊະຍາການເມ່ືອງ ແລະວັນນະຄະດ
ທ່ີຄ້າງຄາຢູ່ປາຍລ້ິນຂອງພວກເຂົາ ແລະທ້າຍທ່ີສຸດ ນັກມ່ືການຫລ້ົນ
ທຸກແບບທຸກແນວ ນັບແຕ່ຫລ້ົນ "ແມວກັບຫນູ" ຈົນຮອດ "ຂະ
ໂມຍກັບໂຈດ". ຢູ່ບ່ອນນ້ີ ພວກເຮົາຍ້ັງສົນທະນາກັນເກ່ົງເຫດ
ການຕ່າງໆ ທ່ີອຸບັດຂ້ຶນໃນຊ່ີວ່ິດຂອງພວກເຮົາ ເຊ່ັນເລ່ືອງທ່ີເລ່ົາມາ
ກ່ອນໆນ້ັນ, ເລ່ືອງການຄ້ົນຈັບ ຫມ້ໍ້ຕ້ົມເຫລ້ົາຂອງພວກຊາວນາທ່ີ
ຢູ່ໃກ້ຄຽງ, ເວ້ົາຮອດເລ່ືອງຫນ້າຍ້ິນດີເຊ່ັນການສ້ອມແປງນ່ິຄ້ົມໃຫມ່
ແລະການດໍາລ່ົງຊ່ີວ່ິດອ້ັນສວຍງາມທ່ີລໍຄອຍພວກເຮົາຢູ່ໃນອະນາຄ່ິດ.

ບາງເທ່ືອ ມ່ິເຕຍກ່ົນ ກໍເລ່ົານ່ິທານ. ຫມ້ໍນ້ີນັບວ່າເປັນຜູ້ມ່ີ
ແອວປະເສ່ິດຢ່າງແທ້ຈ່ິງ, ເຂົາຮູ້ຈັກເລ່ົາເລ່ືອງຢ່າງມ່ີລ້ີລາຄ້ອຍໆການ
ສະແດງລະຄອນ ທ້ັງອອກທ່ົາທ່ີປະກອບບໍ່ຂາດຕອນ. ມ່ິເຕຍກ່ົນ

ຮັກແພງພວກເດັກນ້ອຍໆຫັ້ນຫລາຍ ແລະນິທານຂອງເຂົາກໍ່ກຶກອົກ ກຶກໃຈພວກເຂົາແທ້ໆ. ໃນເລື່ອງຂອງເຂົານັ້ນເກືອບຢ່າກວ່າບໍ່ມີ ເລື່ອງມະຫັດສະຈັນເລີຍ, ຕົວລະຄອນຂອງເຂົາມີທັງມູຊິກບາງເທື່ອ ກໍ່ໂງ່ຈ້າ ບາງເທື່ອກໍ່ສະຫລາວສະຫລາດ, ມີພວກຊຸນນາງຂີ້ລັກ ແລະ ຊ່າງຫັດກະກຳຜູ້ສ່ອງໃສ, ມີຂະໂມຍໃຈກ້າຫລັກແຫລມ, ມີຕຳ ຫລວດຂີ້ໂລບ, ມີພົນທະຫານຜູ້ເກັ່ງກ້າສາມາດ ມີໄຊຊະນະສະ ເຫມີ ແລະພະຄຸນພໍ່ຜູ້ອ້ວນໃຫຍ່.

ໃນຕອນແລງພວກເຮົາມັກອ່ານຫນັງສືຮ່ວມກັນເລື້ອຍໆ. ຫ້ອງ ສະຫມຸດຂອງພວກເຮົາເລີ່ມກໍ່ຕົວຂຶ້ນ ເມື່ອຂ້າພະເຈົ້າຊື້ປຶ້ມມາຈາກ ຮ້ານຂາຍປຶ້ມຫລືໄດ້ມາຈາກການຂໍທານນຳຜູ້ໃດຜູ້ຫນຶ່ງ. ນາຮອດ ທ້າຍລະດູຫນາວພວກເຮົາມີປຶ້ມອັນນະຄະດີກລາຊິກ ຂອງລັດເຊັຍ ເກືອບຄົບທຸກຫົວ ແລະມີປຶ້ມກ່ຽວກັບການເມືອງກັບການກະສິກຳ ຫລາຍສົມຄວນ. ຂ້າພະເຈົ້າໂຊກດີທີ່ໄປພົບສາງຮ້າງຂອງ "ກູມນາ ໂຣບຣາຊ" (ຂະແຫນງຫນຶ່ງຂອງກະຊວງສຶກສາປະຊາຊົນ) ທີ່ມີປຶ້ມ ກ່ຽວກັບວິທະຍາສາດ່າຍດາຍຢູ່ຕ່າງຫລວງຫລາຍ.

ນັກຮຽນຫລາຍຄົນນັກອ່ານ ແຕ່ກໍ່ມີຫນ້ອຍຫລາຍທີ່ສາມາດ ຊາບຊຶມຮັບຮູ້ເນື້ອໃນຂອງປຶ້ມຫນົດທັງຫົວໄດ້. ສິ່ງດ່ຳກ່ວາຊຸກໃຫ້ ພວກເຮົາຈັດຕັ້ງການອ່ານສູ່ກັນຟັງ. ຈັ່ງຊັ້ນຫນົດທຸກຄົນກໍ່ເລີຍໄດ້ ປະກອບສ່ວນນຳ. ຜູ້ອ່ານເລື້ອຍໆແມ່ນ ຊາໂດຣອບ ຜູ້ມີສຳນຽງ ອ່ານຖືກຕ້ອງ ບໍ່ມີບ່ອນຕິ ຫລືວ່າຂ້າພະເຈົ້າເອງ. ຕະຫລອດລະດູ ຫນາວປີທຳອິດນັ້ນ ຜົນງານທີ່ພວກເຮົາອ່ານຫລາຍແມ່ນຂອງ ປຸສະ

ກິນ, ໂກໂຮແລ້ງໂກ, ມາມີນ ຊິບິຣິຍັກ, ເວແຣ້ດຊາເຢັບ ແລະ ສະເພາະແລ້ວກໍແມ່ນຜົນງານຂອງກ້ອກກີ.

ບົດປະພັນຂອງກ້ອກກີ້ສ້າງຄວາມປະທັບໃຈຢ່າງຮຸນແຮງໃຫ້ແກ່ ນັກຟ້າຂອງພວກເຮົາ ແຕ່ຫາກຍັງແມ່ນຄວາມປະທັບໃຈທີ່ຍັງມຸມມົວ ຢູ່. ກາຣາບານິບ, ຕາຣາແນດ, ໂວໂລຄອບ ແລະຜູ້ອື່ນໆອີກຈຳ ນວນຫນຶ່ງນັ້ນ ສະທ້ານໃຈນຳເລື່ອງເພີ່ນຈິດຂອງກ້ອກກີ ແຕ່ບໍ່ຍອມ ສົນໃຈໃນພາກວິໄຈຂອງຜູ້ແຕ່ງ. ແສງຕາຂອງພວກເຂົາລຸກເປັນ ແປວ ເມື່ອໄດ້ຟັງເລື່ອງ "ມາກາກ ຈູດຣາ", ຕິວລະຄອນ ອີກນັດ ກອກເດເຢັບຊ້ຳເຮັດໃຫ້ພວກເຂົາ ຫລົງຮ້ອງອອກມາທ້າຍົກກຳປັ້ນ ຂຶ້ນ, ສ່ວນວ່າເລື່ອງໂສກນາດກະກຳຂອງ "ພໍ່ເກົ້າອາກຄົບ ກັບ ລີອອນກາ" ນັ້ນຊ້ຳເຮັດໃຫ້ພວກເຂົາເຫງົານອນ. ກາຣາບານິບ ນັກຕອນພໍ່ເກົ້າກອກເດເຢັບແນມເບິ່ງເຮືອ "ໂບຍຢາຣິເນຍ" ຂອງ ລາວພັງທະລາຍລົງ ຍ້ອນໂງ່ນນ້ຳກ້ອນແຕກທັບກີມໃສ່ນັ້ນຫລາຍ; ສີຫນ້າຂອງມັນອ່ອນຍານລົງ ແລະຮ້ອງອຸທານອອກມາຢ່າງລືມໂຕພໍ ປານນັກສະແດງລະຄອນໂສກນາດກະກຳວ່າ:

-ອ່າ! ນີ້ ຈັ່ງແມ່ນຄົນ! ອ່າ ຖ້າຫາກວ່າຫມົດທຸກຄົນເປັນຄື ລາວນີ້ເດ້!

ກາຣາບານິບ ຟັງການພັນລະນາເຖິງຄວາມຕາຍຂອງ ອີເລຍໃນ ເລື່ອງ "ຄົນທ້າງສາມ" ດ້ວຍກິລິຍາອາການສະແດງອອກຢ່າງດຽວກັນ ນີ້:

-ອັນນີ້ຈັ່ງແມ່ນນັກຕໍ່ສູ້ຜູ້ທໍລະຫົດ! ຕ້ອງແນວນີ້ລະ...! ເອົາ ຫົວໂຂກໂງ່ນຫີນຈົນຕາຍ, ແບບນີ້ ຈັ່ງແມ່ນຕາຍ.

ຄວາມຂຶ້ນອົກຂຶ້ນໃຈຂອງຜູ້ນິຍົມເລື່ອງເພີ່ນຈົດເຮັດໃຫ້ ມີເຕຍ ກົນ, ຊາໂດຣອບ ກັບ ບູຮຸນ ຫົວຂ້ວນເວົ້າເຍາະເຍີ້ຍແບບແຮງໆວ່າ :

- ສູບໍ່ເຂົ້າໃຈຫຍັງຫມົດ, ຟັງລ້ຳໆຫົວຂີ້ເລື່ອຍເອີ້ຍ!

- ກູຫວະ ບໍ່ເຂົ້າໃຈຫຍັງ?

- ເອີ ມຶ ງັ້ນລະ? ມັນຄັກຈັ່ງໃດ ອັນເອົາຫົວໂຂກໃສ່ໂງ່ນຫີນ ຈົນມຸ່ນງັ້ນນ໊ະ? ທ້າວອີເລຍນັ້ນມັນທ້ຽບ້າທ້ຽໂງ່ຈ້າງັ້ນລະ...ພໍແຕ່ ມີຜູ້ສາວມາເຮັດຕານ້ອຍຕາໃຫຍ່ໃສ່ເທົ່ານັ້ນກໍນ້ຳຕາຍ້ອຍແລ້ວ ຄັນ ແມ່ນກູຫວະ ກູຊິໄປຫັກຄໍພໍ່ຄ້າຄົນອື່ນໆອີກນ່າ ຄົນພວກນີ້ຫລະ ສົມ ຄວນສົ່ງລົງໄປຫມໍ້ຂ້າງຫອງແດງຫມົດຫັ້ນລະ ໂຮມທ້ຽເກົ້າກອກ ເດເຍັບຂອງມຶ ງັ້ນນ໋ຳ.

ທ້ຽສອງຝ່າຍ ມີຄວາມເຫັນພ້ອງກັນ ແລະຕິກລົງກັນໄດ້ກໍແຕ່ ກ່ອງກັບການຕິລາຄາຕົວລະຄອນລູກາ ໃນເລື່ອງ "ພົ້ນເລິກ" ເທົ່າ ນັ້ນ.

- ຕາມໃຈມຶ ງຊະ! - ກາຣາບານິບຍອມທ້ຽແກວ່ງຫົວໄປມາ, - ເກົ້າຫມູ່ນີ້ເປັນປະເພດດຽວກັນຫມົດຫັ້ນແລ້ວ ຈຸ່ນວາຍວິນວອນຢູ່ບໍ່ ແລ້ວ ແຕ່ບໍ່ພໍຄາວຊ້ຳຫາຍໂຕໄປແລ້ວເດ້, ກູເຄີຍຮູ້ຜູ້ຫນຶ ງເປັນ ແບບນີ້ລະ.

- ເກົ້າລູກາຜູ້ນີ້ ສະຫລາດເດ໊, - ມີເຕຍກົນເວົ້າຂຶ້ນ, - ລາວ ເຂົ້າໃຈທຸກສິ ງທຸກຢ່າງຢູ່ໃສກໍໄດ້ຫມົດ. ບາງເທ໊ືອຂີ້ຫລັກຂີ້ສ໊, ບາງ ເທ໊ືອກໍລັກ ແຕ່ບາງເທ໊ືອກໍເປັນນັກບຸນໃຈດີ, ລາວເຮັດໃຫ້ຕົນເອງຢູ່ ລອດກໍພໍແລ້ວ.

ນິຍາຍເລື່ອງ "ໄອເດັກ" ແລະ "ຫາລ້ຽງຊີບ" ສ້ຳງຄວາມປະ

ທັບໃຈພວກເຂົາຮຸນແຮງທີ່ສຸດ. ພວກເຂົາສະຫງັດຟັງບົດອ່ານ, ກັ້ນລົມຫັນໃຈນຳ ແລະຂອນຂໍໃຫ້ອ່ານຕໍ່: "ຈົນເຖິງທ່ຽງຄືນ". ເມື່ອຂ້າພະເຈົ້າເລົ່າເລື່ອງຊີວິດຈິງຂອງ ນາກຊິມ ກ້ອກກີ ໃຫ້ພວກເຂົາຟັງນັ້ນ ໃນຂັ້ນຕົ້ນພວກເຂົາບໍ່ເຊື່ອເລີຍ. ພວກເຂົາຕື່ນເຕັ້ນນຳເລື່ອງນີ້ຫລາຍ ແຕ່ແລ້ວໃນທັນທີທັນໃດນັ້ນ ກໍມີຄຳຖາມວ່າ:

- ຊັ້ນຫມາຍຄວາມວ່າ ກ້ອກກີກະຄືກັບພວກເຮົາຫັ້ນຕ່ວ? ມັນກະຄັກລະບໍ່ຊັ້ນ!

ແນວຄວາມຄຶດນີ້ກະທົບພວກເຂົາຢ່າງເລິກເຊິ່ງ ທັ້ງເຮັດໃຫ້ພວກເຂົາມ່ວນຊື່ນຫົວໃຈຢ່າງສຸດຂີດ.

ຊີວິດຂອງ ນາກຊິມ ກ້ອກກີ ກາຍເປັນພາກສ່ວນຫນຶ່ງຂອງຊີວິດພວກເຂົາ. ຫລາຍອັນຫລາຍຕອນຂອງຊີວິດເພິ່ນຖືກຍົກມາເປັນແບບຢ່າງສົມທົບ, ເປັນສົມມະຍານາມ, ເປັນບ່ອນອີງເບື້ອງຫລັງຮອງຮັບການກ່ຽວກ່ຽງ ແລະບັນທັດຖານວັດແທກຄຸນຄ່າຂອງມະນຸດຊາດ.

ພວກເຮົາໃສ່ຊື່ນິຄົມວ່າກ້ອກກີ ຢ່າງບໍ່ມີການຕົກລົງຫລືການຍືນຍັນຢ່າງເປັນທາງການແຕ່ຢ່າງໃດ. ຢູ່ໃນເມືອງຜູ້ຄົນຄ່ອຍໆລົ້ງເຄີຍກັບການເອີ້ນຊື່ອັນນີ້ຂອງພວກເຮົາຫລາຍຂຶ້ນເປັນລຳດັບ ໂດຍບໍ່ມີການຕໍ່ວ່າທັກທ້ວງຄັດຄ້ານ ຫມາຍຕາແລະສະແຕມໃຫມ່ຂອງພວກເຮົາທີ່ໃສ່ຊື່ນັກປະພັນ. ໂຊກບໍ່ດີແຕ່ວ່າ ພວກເຮົາໃຊ້ເວລາໄປຫລາຍເຕີບ ເພື່ອພົວພັນຕິດຕໍ່ກັບນາກຊິມ ກ້ອກກີ ເພາະວ່າຢູ່ໃນເມືອງທີ່ພວກເຮົາຢູ່ນັ້ນ ບໍ່ມີໃຜຈັກຄົນເລີຍທີ່ຮູ້ຈັກບ່ອນຢູ່ຂອງເພິ່ນ ຈົນມາຮອດປີ ໑໙໘໕ ພີ້ ພວກເຮົາຈຶ່ງໄດ້ອ່ານບົດຄວາມວາລະສານລາຍ

ສັບປະດາສະບັບຫນ່ຶ່ງທ່ີເວ້ົາຮອດ ຊີວິດຂອງກ້ອກກີຢູ່ປະເທດອິຕາລີ. ໃນນ້ັນ ເພ່ິນພົມຊ່ືຕາມພາສາອິຕາລີວ່າ ມາດຊິໂມ ກ້ອກກີ, ຈ່ັງ ຊ້ັນພວກເຮົາຈ່ຶງສ່ົງຈົດຫມາຍສະບັບຫນ່ຶ່ງເກ່ົາເພ່ິນ ໂດຍໃສ່ບ່ອນຢູ່ ສ້ັນຈຸດປ່ຶດແບບນ້ີ: "ມາດຊິໂມ ກ້ອກກີ, ປະເທດ ອິຕາລີ".

ນ້ັກຮ້ອງຂອງພວກເຮົາທ້ັງຮຸ່ນນ້ອຍ ແລະຮຸ່ນໃຫຍ່ລ້ວນແຕ່ຂ້ຶນ ອ້ຶກຂ້ຶນໃຈນ່ຶງບ້ິດຮ້ອງ ແລະຊີວະປະຫວ້ັດຂອງກ້ອກກີ ທ້ັງນ້ັນ ແຕ່ ພວກຮຸ່ນນ້ອຍສ່ວນຫລວງຫລາຍກ່ືກຫນ້ັງສ່ື.

ພວກເຮົາມ່ີເດ້ັກພວກນ້ີຢູ່ ໑໘ ຄົນ, ອາຍຸແຕ່ ໑໐ ປ່ີຂ້ຶນໄປ. ສະມາຊ່ິກຂອງໂລກນ້ອຍໆໂລກນ້ີ ເຕ້ັມໄປດ້ວຍຄວາມກະຕ່ືລ້ືລ້ົນຕ່ໍຊ່ີ ວ່ິດ, ວ່ອງໄວຫລ້ິບເກ່ັງ ທ້ັງລ້ັກຫລ່ອຍກໍເປ້ັນ ແລະ ເປ່ີເປ້ົ່ອນ ແຕ່ຫ້ົວຮອດຕ່ີນຢູ່ຕະຫລ່ອດເວລາ. ພວກເຂົາມາຮອດນ່ິຄ້ົມໃນສະ ພາບຂ້ຶດງ່ດເປ້ັນທ່ີ່ສຸດ ບາງຄົນເປ້ັນຂ້ ້ຫ ິດ, ຕຸ່ມເປ່ືອຍຈ່ອຍແຫ້ງກະ ດູກອ່ອນ. ເອ ົາເຕ ີ ຣ ິ ນາ ກ ຣ ິ ກ ໍ ເຮ ັ ບນາ ເຊ ົ ່ ງເປ ັ ນແພດ ແລະພະ ຍາບານອາສາສະໝ ັ ກຂອງພວກເຮົ ານ ັ ້ ນ ຍາມໃດກ ໍ ຫ ົ ວຫ ມ ຸ ນຢ ູ ່ ນ ໍ າ ພວກເຂົ າ. ເ ົ ່ ງແມ ່ ນວ ່ ານ ົ ງຈະເຄ ັ ່ ງຄ ັ ດ, ແຕ ່ ພວກເຂ ົ າ ກ ໍ ພ ົ ງ ກ ັ ນ ແຫ ່ ແຫນນ ົ ງຢ ູ ່ ຈ ົ ່ ງ ຊ ້ ັ ນ. ນ ົ ງຮ ູ ້ ຈ ັ ກຮ ້ ົ ຍວ ່ າເຂ ົ າ ຄ ື ແມ ່ ກ ັ ບລ ູ ກ, ຮ ູ ້ ຈ ັ ກຄ ວ ົ ມອ ່ ອນແອທ ຸ ກ ໆ ອ ັ ນຂ ອ ງພ ວ ກ ເ ຂ ົ າ ບ ່ ຍ ອ ມ ເ ຊ ື ່ ອ ວ ່ າ ຈ ົ ກ ໃ ດ ໆ ຂ ອ ງ ພ ວ ກ ເ ຂ ົ າ (ຂ ້ ົ າ ພ ະ ເ ຈ ົ ້ າ ເ ອ ົ ງ ນ ້ ັ ນ ບ ່ ໍ ເ ຄ ີ ຍ ປ ິ ດ ປ ່ ອ ຍ ຕ ີ ນ ເ ອ ົ ງ ອ ອ ກ ຈ າ ກ ຈ ຸ ດ ອ ່ ອ ນ ອ ັ ນ ນ ້ ີ ຈ ັ ກ ເ ທ ື ່ ອ), ບ ່ ຍ ອ ມ ປ ່ ອ ຍ ໃ ຫ ້ ຄ ວ າ ມ ຜ ິ ດ ພ າ ດ ໃ ດ ໆ ລ ອ ດ ຜ ່ ານ ໄ ປ ໄ ດ ້ ,ແ ລ ະ ສ ະ ແ ດ ງ ຄ ວ າ ມ ບ ່ ໍ ພ ໍ ໃ ຈ ຢ ່ າ ງ ຈ ະ ແ ຈ ້ ງ ຕ ່ ໍ ກ ານ ລ ະ ເ ມ ີ ດ ລ ະ ນ ອ ບ ອ ີ ໄ ນ ເ ລ ັ ກ ໆ ນ ້ ອ ຍ ໆ ທ ຸ ກ ຢ ່ າ ງ ຂ ອ ງ ພ ວ ກ ເ ຂ ົ າ.

ແ ຕ ່ ໃ ນ ທ າ ງ ປ ້ ິ ນ ກ ັ ນ ນ າ ງ ຊ ້ ໍ ມ ີ ພ ອ ນ ສ ະ ຫ ວ ັ ນ ພ ິ ເ ສ ດ ໃ ນ ເ ລ ື ່ ອ ງ ເ ລ ົ ່ ອ ງ

ປາກເວົ້າກັບເດັກນ້ອຍ ມີອາລົມຈິດອັນເຕັມໄປດ້ວຍມະນຸດສະຍະ ທຳແບບງ່າຍໆຂອງຜູ້ເປັນແມ່ຕໍ່ອະນາຄົດຂອງລູກວ່າ ເຂົາຈະໄດ້ເປັນ ພົນທະຫານເຮືອ, ນາຍທະຫານໃນກອງທັບແດງຫລືອື່ນໆ ກອນ. ບໍ່ມີໃຜອີກແລ້ວ ທີ່ຈະເຂົ້າໃຈໄດ້ດີຄືກັບນາງວ່າ ຊີວິດອັນ ຊົ່ວຮ້າຍຫຍາບຕ່ຳນັ້ນ ໄດ້ສ້າງຮອຍເຈັບຊ້ຳໃສ່ຫົວໃຈແກ່ພວກເດັກ ເຫລົ່ານີ້ຮ້າຍແຮງເລິກລ້ຳຊ່ຳໃດ. ຍິ່ງໄປກ່ວານີ້ ນາງຍັງຮູ້ຈັກວິທີ ລ້ຽງດູພວກເຂົາດ້ວຍການລັກເອົາອາຫານສົ່ງໃຫ້ພວກເຂົາແບບລັບໆ ຊ່ຳເປັນການລະເມີດກົດລະບຽບ ແລະວິໄນຂອງພະແນກເສດຖະກິດ ທ້ັງສາມາດພິຊິດຄວາມເຄັ່ງຄັດຂ້ຽວຂາດຈອມໂຫດຂອງ ການິນາ ອີວານໂນວິດ ດ້ວຍຄວາມເວົ້າອັນຈືບງາມ.

ພວກນັກຮຽນຮຸ່ນເກົ່າແນມເຫັນ ສາຍພົວພັນລະຫວ່າງ ເອີກາ ເຕີຣີນາ ກຣີກໍເຣັບນາ ກັບພວກເດັກນ້ອຍແລ້ວ ແລະພວກເຂົາກໍບໍ່ ຂັດຂວາງແຕ່ຢ່າງໃດ ກົງກັນຂ້ານ ຍາມໃດພວກເຂົາກໍຕິກລົ້ງເຫັນ ດີນຳທັ້ງໃຫ້ຄວາມປົກປ້ອງເອົາອົກເອົາໃຈ ຄອຍຮັບໃຊ້ເລັກໆນ້ອຍໆ ເມື່ອໃດນາງຫາກຮຽກຮ້ອງເຊັ່ນເບິ່ງວ່າພວກເດັກນ້ອຍອາບ ນ້ຳກ້ຽງດີ ບໍ່ ມັນຖືສະບູທ່ອຕົນຕົວບໍ່, ຫ້ານບໍ່ໃຫ້ພວກເຂົາດູດຢາ, ຈືກເສື້ອ ຜ້າ ຕ່ອຍຕີກັບ ແປດເຕຍແລະອື່ນໆອີກຫລາຍຢ່າງ.

ເວົ້າໄດ້ວ່າ ແມ່ນ້ອນເອີກາເຕີຣີນາ ກຣີກໍເຣັບນາເອງແທ້ໆ ທີ່ ເດັກນ້ອຍຮຸ່ນໃຫຍ່ຢູ່ໃນນິຄົມຂອງພວກເຮົາຈຶ່ງຮັກແພງ ພວກຮຸ່ນ ນ້ອຍ ແລະຍາມໃດກໍປະຕິບັດຕົນ ບໍ່ຕ່າງຫຍັງກັບເປັນອ້າຍໃຫຍ່ຂອງ ພວກເຂົາ, ໃຫ້ທັ້ງຄວາມອົບອຸ່ນຍຳແຢ້ງເດັດຂາດ ແລະນັບຖືກັນ ຢູ່ໃນຕົວ.

ບົດທີ ๑๑

ໄຊຊະນະໃນເລື່ອງຈັກຫວ່ານ

ນັບມື້ກໍຍິ່ງເປັນທີ່ຈະແຈ້ງວ່າ ນິຄົມຂອງພວກເຮົາມີຄວາມຫຍຸ້ງຍາກ ໃນການລ້ຽງມື້ບຸກເບີກວຽກງານກະເສດຕະກຳ ແລະສາຍຕາຂອງພວກເຮົາ ກໍມັກຫັນໄປແນມເບິ່ງເຄຫາຫລັງໃຫມ່ແຄມຝັ່ງນ້ຳຫ້ວຍ ສວນຕົ້ນໄມ້ໃຫບ້ານເຮືອງເຮືອໃນລະດູບານໃຫມ່ ກັບທົ່ງນາດິນດຳ ນ້ຳຊຸ່ມຂອງມັນພຸ້ນຫລາຍກວ່າ.

ແຕ່ວຽກງານການສ້ອມແປງຢູ່ໃນນິຄົມຫລັງໃຫມ່ດຳເນີນໄປຢ່າງ ຊັກຊ້າທີ່ສຸດ. ພວກຊ່າງເຮືອນທີ່ພວກເຮົາວ່າຈ້າງມາດ້ວຍລາຄາ ຕ່ຳງັ້ນ ມີຄວາມສາມາດແຕ່ພໍເຮັດເຮືອນມຸງຫຍ້າແບບຂອງຊາວນາ ແຕ່ເມື່ອມາປະສົບກັບການມຸງຫລັງຄາເຮືອນຕຶກ ເຊິ່ງເຖິງວ່າບໍ່ສັບສົນເທົ່າໃດ ກໍໄດ້ແຕ່ພາກັນອ້າປາກຄ້າງ. ພວກເຮົາຮອດບໍ່ສາມາດ ຫາແຜ່ນແກ້ວ ບໍ່ວ່າແຕ່ຈະແລກດ້ວຍຕ່ອນຄຳຫລືຕ່ອນເງິນ ເຊິ່ງ ພວກເຮົາກໍຍັງບໍ່ມີນັ້ນຊ້ຳ. ມາຮອດທ້າຍລະດູຮ້ອນ ເຮືອນຕຶກສອງ ສາມຫລັງເປັນຮູບຮ່າງພໍເບິ່ງໄດ້ແລ້ວ ແຕ່ຍ້ອນບໍ່ມີແຜ່ນແກ້ວປ່ອງ ຢ້ຽມ ການຈະເຂົ້າໄປຢູ່ໃນຕຶກກໍເປັນອັນລົ້ມເລີກໄປ. ພວກເຮົາ ສ້ອມແປງເຮືອນນ້ອຍໆຫລາຍຫລັງຮຽບຮ້ອຍແລ້ວ ແຕ່ເຮືອນເຫລົ່ານີ້ໃຊ້ເປັນບ່ອນຢູ່ຂອງພວກຊ່າງເຮັດເຮືອນ, ຊ່າງກໍ່ເຕົ້າກັບພວກຄົນຍາມ. ການ ຍົກຍ້າຍເດັກນ້ອຍເຂົ້າໄປຢູ່ ທັງທີ່ຍັງບໍ່ມີໂຮງຊ່າງແລະ ການປູກຝັງຢ່າງໃດຢ່າງຫນຶ່ງບິນຜ່ານແຜ່ນດິນນີ້ ນັ້ນນັບວ່າເປັນເລື່ອງ ໄຮ້ຄວາມຫມາຍ, ມັນບໍ່ມີທາງເຮັດຢ່າງອື່ນເລີຍ.

ພວກນັກຮຽນພາກັນໄປຍັງນິຄົມໃຫມ່ເກືອບທຸກມື້, ຢູ່ທີ່ນັ້ນ ພວກເຂົາໄດ້ສຳເລັດວຽກງານຫລາຍເຕີບແລ້ວ. ໃນລະດູຮ້ອນ, ພວກເດັກນ້ອຍຜູ້ຊາຍປະມານ ສິບຄົນເອົາກະໂຈມຜ້າໄປປຸກນອນ ແລະເຮັດວຽກຢູ່ໃນສວນຕົ້ນໄມ້. ພວກເຂົາເກັບຫມາກປອມກັບ ຫມາກຄາຍຂອງສົ່ງມາໃຫ້ນິຄົມເກົ່າ. ຍ້ອນພວກເຂົາ ສວນຕົ້ນໄມ້ ຂອງ ເຄຫາ ແຕຣແກ ຈຶ່ງມີໃບຫນ້າເກືອບຢາກວ່າເປັນຕາເບິ່ງ ຫລືວ່າຢ່າງຫນ້ອຍເປັນບ່ອນທີ່ໃຫ້ຜົນຢ່າງແທ້ຈິງ.

ພວກປະຊາຊົນຄຸ້ມບ້ານ ກົງຊາຣອບກາ ຮູ້ສຶກກະທົບກະເທືອນ ຮຸນແຮງຫລາຍ ຍ້ອນການມາຄອບຄອງເຄຫາຮ້າງແຫ່ງນີ້ ໂດຍ ເຈົ້ານາຍໃຫມ່ ສະເພາະແລ້ວ ເມື່ອພວກເຂົາເຫັນວ່າເຈົ້ານາຍໃຫມ່ ເຫລົ່ານີ້ຊອມຈຸ່ທຸກຍາກຂາດເຂີນພໍພຽງໃດ. ໂດຍທີ່ຂ້າພະເຈົ້າບໍ່ ຄາດຝັນມາກ່ອນ, ຫນັງສືອະນຸມັດໃຫ້ຄອບຄອງທີ່ດິນ ຜ0 ເດເຊຍ ຕິນ ໄດ້ກາຍເປັນ ແຜ່ນເຈ້ຍທີ່ກໍ່ໃຫ້ມີການຜິດຫຽງກັນລ້ຽງທັງນີ້ ຍ້ອນວ່ານັບແຕ່ປີ ດ0ດ0 ມາ, ຜືນແຜ່ນດິນທຸກຽ່ອມຫຍ້າຂອງ ແຕຣແກ ໂຮມທັງພາກສ່ວນທີ່ພວກເຮົາມີສິດຄອບຄອງນີ້ແມ່ນ ບ່ອນຊາວນາຊົນໃຊ້ມາແລ້ວທັງນັ້ນ.

ຢູ່ໃນເມືອງຜູ້ຄົນພາກັນຫົວຂວັນຄວາມເຊື່ອຊ້າເຫງົາຫງ່າກຂອງ ຂ້າພະເຈົ້າ.

-ຖ້າຫາກວ່າເຈົ້າໄດ້ຮັບໃບອະນຸມັດ, ມັນກໍແນ່ນອນແລ້ວວ່າ ດິນເປັນຂອງພວກເຈົ້າ, ພວກເຈົ້າມີແຕ່ຊິໃບຢູ່ ແລະຈັດການປຸກ ເບີກມັນທໍ່ນັ້ນລະ.

ແຕ່ປະທານສະພາໂຊວຄບ້ານ ທ້າວ ແຊກເກີ ເປໂຕຣວິດ ເກຣຊານີ ມີຄວາມເຫັນອີກແບບຫນຶ່ງ, ລາວເວົ້າວ່າ:

- ພວກເຈົ້າເຂົ້າໃຈຕີວ່າເປັນແນວໃດ, ເມື່ອຊາວນາຜູ້ດຸໝັ່ນອອກແຮງງານ ໄດ້ຮັບດິນຕາມທີ່ກົດຫມາຍອະນຸມັດໃຫ້ແລ້ວຈັ່ງຊີ້ ມັນຫມາຍຄວາມວ່າ ເຂົາຊິຄາດໄຫມັນສືບຕໍ່ໄປ, ແລ້ວຕໍ່ມາພາຍຫລັງມາເກີດມີຜູ້ໃດຜູ້ຫນຶ່ງມາຂຽນໃບບິງມອບສິດ ຫລືເຈ້ຍອື່ນໆ, ແນ່ນອນວ່າຫມໍນັ້ນ ກຳລັງເອົາມີດແຫລມມາສຽບໃສ່ກາງຫລັງຊາວນາຜູ້ອອກແຮງງານຫັ້ນລະ, ຈັ່ງຊັ້ນສຳລັບພວກເຈົ້າຫັ້ນ ຂ້ອຍຂໍແນະນຳວ່າມ້ຽນໃບບິງນັ້ນໄວ້ສາ.

ຫົນທາງຍ່າງໄປສູ່ນິຄົມໃຫມ່ຕັດໄປຕາມຝັ່ງນ້ຳຫ້ວຍ ໂກໂລ ມາກ, ພວກເຮົາຕ້ອງເຮັດເຮືອຂ້າມເອົາເອງ, ພວກເດັກນ້ອຍຕັ້ງ ຜຽນກັນຮັບເປັນຄົນພາຍເຮືອຂ້າມປະຈຳຢູ່ທ່າແຄມຫ້ວຍນີ້. ແຕ່ ຖ້າມີກອງນເຊິ່ງໂດຍທົ່ວໄປມັກມີມ້າມາພ້ອມນັ້ນ ພວກເຮົາຕ້ອງໄດ້ ອ້ອມໂຄ້ງໄປຜ່ານທາງຫມູ່ບ້ານກົງຊາຣອບກາພຸ້ນ ປະຊາຊົນບ້ານນີ້ ໃຫ້ການຕ້ອນຮັບພວກເຮົາແບບເປັນສັດຕູຫນ້ອຍຫນຶ່ງ. ເມື່ອແມ ເຫັນລົດມ້າບັນທຸກອັນດ້ອຍຄ່າຂອງພວກເຮົາ ຂະເຈົ້າກໍພາກັນຫ້ອ ຂ້ອນແລະຮ້ອງມາໃສ່ວ່າ:

- ເຮ້ຍ ພວກຂີ້ທຸກ! ສູຢ່າເຮັດເຫົ່າເຮ່ຍໃສ່ຂີ້ວພວກກູລະ! ສູ ຫາດາຊອກໄປຂ້າມທາງອື່ນຄືຊິດີກ່ວາ ບໍ່ດົນດອກພວກກູຫາກຊິໄປ ເຊີນສູອອກຈາກເຄຫາ ແຕຣແກ ເອງ!

ພວກເຮົາບໍ່ໄດ້ຍ້າຍມາຢູ່ ກົງຊາຣອບກາ ນີ້ ໃນຖານະຄົນບ້ານ ໃກ້ເຮືອນຄຽງທີ່ດີກັບປະຊາຊົນແຕ່ໃນຖານະຄູ່ແຂ່ງຂັນກັບພວກເຂົາ.

ເມື່ອຕົກຢູ່ໃນທ່າເປັນທະຫານຄືແນວນີ້ ແລ້ວຖ້າພວກເຮົາບໍ່ສະແດງ
ຕົວວ່າພ້ອມສະເຫມີສຳລັບການຕໍ່ສູ ພວກເຮົາກໍຄົງສູນເສຍດິນແລະ
ຕຶກນິຄົມໄປຫມົດແນ່ນອນ. ພວກຊາວນາເຂົ້າໃຈດີວ່າ ການປະທະ
ຜິດກຽງກັນແບບນີ້ ບໍ່ອາດຕົກລົງແກ້ໄຂໄດ້ຢູ່ໃນຫ້ອງການແຕ່ຕ້ອງ
ເຮັດຢູ່ກັບບ່ອນໂລດ. ນັບເປັນເວລາສາມປີມາແລ້ວ ທີ່ພວກເຂົາ
ເຮັດນາໃສ່ດິນຂອງ ເຄຫາແຕຣບແກ ຈັ່ງຊັ້ນຈົ່ງກຳນົດສຶກຢ່າງຫນຶ່ງ
ຂຶ້ນເອົາເອງ ແລ້ວອີງໃສ່ສຶກຂໍ້ນີ້ກໍພາກັນທຳການປະທ້ວງຂຶ້ນ. ເປັນ
ຕາຍຮ້າຍດີຢ່າງໃດຈຳຕ້ອງຍຶດອາຍຸສຶກອັນນີ້ອອກໄປອີກ ຄວາມຫວັງ
ທັງມວນຂອງພວກເຂົາອີງໃສ່ນະໂຍບາຍອັນນີ້.

ໃນຂະນະດຽວກັນ ຄວາມຫວັງອັນດຽວຂອງພວກເຮົາຊ້ຳແມ່ນ
ການລົງມືບຸກເບີກດິນຕອນນີ້ໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້.

ເຈົ້າຫນ້າທີ່ ໄດ້ມາວັດແທກທີ່ດິນພາກສ່ວນຂອງພວກເຮົາໃນ
ລະດູຮ້ອນ ແຕ່ພວກເຂົາຢ້ານບໍ່ກ້າເອົາອຸປະກອນອອກມາໃຊ້ຢ່າງ
ເປີດເຜີຍ ໄດ້ແຕ່ຊີ້ໃຫ້ພວກເຮົາເບິ່ງໃນແຜນທີ່ເທົ່ານັ້ນວ່າມີຮ່ອມ
ຮ່ອງບ່ອນໃດແດ່ໂຄກປ່າບ່ອນໃດທີ່ຢູ່ໃນຂອບເຂດດິນຂອງພວກເຮົາ
ເມື່ອໄດ້ຮັບເອກະສານບັນທຶກຈາກພວກເຂົາ ແລ້ວຂ້າພະເຈົ້າຈຶ່ງໄປ
ຍັງບ້ານ ກົງຊາຣອບກາ ໂດຍເອົາພວກເດັກນ້ອຍຮຸ່ນໃຫຍ່ຕິດຕາມ
ໄປນຳຫລາຍຄົນເຕີບ.

ບັດນີ້ ປະທານສະພາໂຊວຽດຂອງບ້ານຄືທ່ານ ລຸກາ ເຊມີໂນ
ວິດ ແວກໂກລາ ນັ້ນໄດ້ກາຍເປັນຜູ້ຮູ້ຈັກລົ້ງແກວ່ນຂອງພວກເຮົາ
ແລ້ວ. ລາວຕ້ອນຮັບພວກເຮົາຢ່າງດີ ເຊື້ອເຊີນໃຫ້ນັ່ງ ແຕ່ບໍ່

ເສືອກແສງຕາເບິ່ງຮອດຫນ້າສີບັນທຶກ ຂອງເຈົ້າຫນ້າທີ່ວັດແທກຕາ
ດິນ.

-ອ້າຍນ້ອງເອີ້ຍ ຂ້ອຍເສຍໃຈແທ້ໆ ຂ້ອຍບໍ່ສາມາດເຮັດຫຍັງ
ໄດ້ດອກ ຊາວນາພວກເຮົາເຄີຍປູກເຂົ້າໃສ່ດິນຕອນນີ້ມາດິນແລ້ວ
ຂ້ອຍບໍ່ອາດຮ້າຍດ່າພວກເຂົາ ຊອກຫາດິນບ່ອນອື່ນດີກ່ວາ!

ເມື່ອຊາວນາ ເລີ່ມເຂົ້າມາໄກດິນນາຢູ່ໃນຂອບເຂດຂອງພວກ
ເຮົານັ້ນ ຂ້າພະເຈົ້າເອົາປ້າຍໄປຕິດປະກາດວ່າ "ທາງນິຄົມ ຈະບໍ່
ຈ່າຍຄ່າໄກນາບົນທີ່ດິນຂອງນິຄົມໃຫ້ແກ່ຜູ້ໃດ."

ຂ້າພະເຈົ້າເອງ ຮອດບໍ່ເຊື່ອໃນປະສິດທິພາບຂອງມາດຕະການ
ແນວນີ້ດອກ ພໍພຽງແຕ່ຄິດວ່າ "ຕ້ອງຍຶດດິນຄືນຈາກຊາວນາ" ເທົ່າ
ນັ້ນ ຫົວໃຈກໍກະດ້າງໄປແລ້ວ ເພາະຊາວນາເປັນຜູ້ອອກແຮງງານ
ພວກເຂົາຕ້ອງການດິນ ຄືກັນກັບຕ້ອງການອາກາດສຳລັບຫາຍໃຈ.

ແຕ່ແລ້ວ ໃນເວລາອັນຫນຶ່ງ ຫລັງຈາກນີ້ບໍ່ດົນເທົ່າໃດ ຊາໂດ
ຮອບ ກໍພາບ່າວໄທບ້ານຄົນຫນຶ່ງຊື່ຂ້າພະເຈົ້າບໍ່ເຄີຍເຫັນຫນ້າມາ
ກ່ອນ ມາຫາຢູ່ຫໍພັກນິຄົມ. ຊາໂດຮອບ ມີທ່າທີຕື່ນເຕັ້ນຮ້ອນຮົນ
ຈົນເຫັນໄດ້ຄັກ:

-ເຈົ້າລອງຟັງມັນເບິ່ງແມ້, ຟັງມັນແມ້! -ການາບານິບ ເວົ້າ
ເປັນຈັງຫວະຄືຫໍນອງເພງໂກບັກແລ້ວຮ້ອງແຮງໆໄປທົ່ວຫໍພັກວ່າ:

-ອ່າ... ອ່າບາດນີ້ແລ້ວຊິໄດ້ເຫັນດີກັນ ເກົ່າ ແວກໂກລາ
ເອີ້ຍ!

ພວກເດັກນ້ອຍ ຫຍັບແຫຍ້ເຂົ້າມາຫຸ້ມລ້ອມພວກເຮົາ.

ແຂກຫນຸ່ມຂອງພວກເຮົາ ແມ່ນສະມາຊິກກົມໂຊໂມນຄົນຫນຶ່ງ ຂອງບ້ານ ກົງຊາຣອບກາ.

- ພວກເຈົ້າມີສະມາຊິກນຳກັນຈັກຄົນ? ຂ້າພະເຈົ້າຖາມຂຶ້ນ.

- ສາມຄົນເທົ່ານັ້ນ.

- ບໍ່ຫລາຍກວ່ານີ້ຫວະ?

- ຂ້ອຍເວົ້າໄດ້ແຕ່ຂ່າສຳລັບພວກເຮົາເອງ ກໍບໍ່ຄັກປານໃດ ດອກ, - ເຂົາເວົ້າຕໍ່, - ບ້ານນີ້ແມ່ນບ້ານຊາວນາຮັ່ງ, ເຈົ້າຄົງ ເຫັນແລ້ວ, ວ່າຢູ່ຫນີ້ແມ່ນພວກເຈົ້າຂອງນາເປັນຜູ້ບ່ຽງການຫມົດ. ຄົນພວກເຮົາສົ່ງຂ້ອຍມາບອກໃຫ້ເຈົ້າຍ້າຍໄປຢູ່ພຸ້ນໄວ ເທົ່າທີ່ຈະໄວ ໄດ້. ແລ້ວເລື່ອງອື່ນຈຶ່ງວ່າກັນ. ມັນຊິດຸເດືອດຄັກໆຕ່ວາ. ຄົນຂອງ ເຈົ້າກະເປັນນັກສູ້ສົມຄວນ, ໂອ່ ຄັນເຮົາມີຄົນຄືພວກເຈົ້າແມ້... ມັນກະຄັກລະບໍ!

- ແຕ່ພວກເຮົາກໍຍັງບໍ່ຮູ້ວ່າຊິເຮັດຈັ່ງໃດກັບດິນຕອນນີ້ຊ້ຳນ່າ.

- ກໍແມ່ນຍ້ອນເຫດຜົນອັນນີ້ ແລ້ວຂ້ອຍຈຶ່ງມາຫາພວກເຈົ້າ. ຍາດເອົາ... ໃຊ້ກຳລັງໂລດ. ຢ່າໄປສົນນຳທ້າວເຜດຫົວແດງ ລູກ ຫັ້ນເທາະ, ພວກເຈົ້າຮູ້ບໍ່ວ່າແມ່ນຜູ້ໃດແດ່ຊິມໃຊ້ດິນຕອນທີ່ເພິ່ນ ມອບໃຫ້ພວກເຈົ້າແລ້ວຫນີ້?

- ບໍ່, ມີໃຜແດ່ລະ?

- ບອກໄວ, ສະບີຣິດົງ, ບອກໄວ! ພວກເດັກນ້ອຍຮ້ອງຂຶ້ນ.

ສະບີຣິດົງ ຈົ່ມຊື່ຕ່າງໆທັງນັ້ນນຶ່ງມືໄປພ້ອມ:

- ມີ ເກຣຊານີ ອັງດຣີ ກາໂປວິດ...

- ພໍ່ເກົ້າອັງດຣີ ກາໂປວິດ ຫັ້ນຫວະ? ຢູ່ພີ້ລາວກໍມີນາທົ່ງ ຫນຶ່ງແລ້ວເດ້.

-ຄືເຈົ້າວ່ານັ້ນແລ້ວ... ມິເປໂຕຣ ເກຣຊານີ, ໂອໂນປຣີ ເກຣຊານີ, ສະໂຕມູກາ... ຫມໍນີ້ຢູ່ຕໍ່ຫນ້າວັດຫັ້ນກໍ. ເອີ ຊິ່ນັ້ນວ່າ ເຊໂຣກາ ແລ້ວຍັງມີ ສະໂຕມູກາ ອີກຜູ້ຫນຶ່ງ ຢາວຖຸກແລະກະໂຕ ລູກາ ເຊມືອໂນວິດ ເອງນໍ ທ້ັງຫມົດເປັນ ຝ ຄົນ!

-ບໍ່ແມ່ນຕິ? ຈັ່ງໃດຈຶ່ງເປັນແນວນີ້ໄປໄດ້? ຊັ້ນຄະນະກໍາມະ ການ ຊາວນາທຸກຂອງພວກເຈົ້າພາກັນເຮັດຫຍັງຢູ່?

-ຄະນະກໍາມະການຂອງພວກເຮົາບໍ່ເຂັ້ມແຂງດີປານໃດ, ມັນ ເປັນແນວນີ້ນ່າ ດົນຕອນນີ້ຢູ່ຕິດກັບຕຶກເລີຍ ໄດ້ມີການປະຊຸມກັນວ່າ ຄວນເຮັດແນວໃດແລ້ວ ແຕ່ໃນເມື່ອວ່າຄະນະສະພາໂຊວຽດບ້ານກໍ ແມ່ນພວກເຂົາເອງຢູ່ແລ້ວ ຈັ່ງຊັ້ນພວກເຂົາກໍເລີຍຈັດແບ່ງກັນເອງ ແຕ່ພາຍໃນພວກເຂົາ.

-ແຕ່ວ່ານັ້ນ ມັນແມ່ນເລື່ອງອື່ນເດ້! - ກາຣາບານີບຮ້ອງ ຂຶ້ນ, - ລູກາ ເອີ້ຍກວມລະວັງໂຕເດ້!

ໃນຕົ້ນເດືອນກັນຍາ ຂ້າພະເຈົ້າກັບຄືນໄປໃນເມືອງ. ປະມານ ບ່າຍສອງໂມງ ກອງບໍ່ລະຫັ້ມຂອງພວກເຮົາເຄື່ອນຍ້າຍໄປ ຢ່າງຊ້າໆ ຂ້າພະເຈົ້າຟັງສຽງຈິ່ມອຸ່ມໆຂອງ ອານໂຕນ ບຣາເຊັ້ນໂກ ທີ່ພັນລະນາຢ່າງຍືດຍາວ ກ່ຽວກັບນິໄສໃຈຄໍຂອງມ້າບັກແດງ, ພ້ອມ ດຽວກັນກໍຄິດເຖິງວຽກງານອື່ນໆຂອງນິຄົມໄປພ້ອມ.

ໃນທັນທີທັນໃດນັ້ນ ບຣາເຊັ້ນໂກ ກໍມິດງຽບໄປ ແລ້ວຕາຈັບ ຈ້ອງໄປຍັງຈຸດຫ່າງໄກທາງຫນ້າບິນກະຫນິນ, ເຂົາລຸກຂຶ້ນ ແລະ ຟາດແສ້ໃສ່ມ້າ ແລ້ວກອງນ້ໍາພວກເຮົາກໍແລ່ນລົວຖາກກະຫນິນປູ ຫີນໄປສຽງດັ່ງສະຫນັ່ນ. ອານໂຕນປ່ຽນມືຖືມ້າສັບໄປມາ ເຊິ່ງແມ່ນ

ແນວທີ່ເຂົາບໍ່ເຄີຍເຮັດຈັກເທື່ອ ແລ້ວຫມໍກໍຮ້ອງອັນໃດອັນຫນຶ່ງໃສ່ຂ້າພະເຈົ້າ. ໃນທີ່ສຸດ ຂ້າພະເຈົ້າຈຶ່ງເຂົ້າໃຈວ່າແມ່ນເລື່ອງຫຍັງ.

-ພວກເຮົາ... ຍຶດຈັກຫວ່ານໄດ້ແລ້ວ!

ບ່ອນທາງໂຄ້ງເຂົ້ານິຄົມ, ພວກເຮົາເກືອບພາກວນແລ່ນເຂົ້າຢຽບຈັກຫວ່ານ ເຊິ່ງກໍາລັງກົ້ງມາດ້ວຍຄວາມໄວສຸດຂີດ, ຕິດຕາມດ້ວຍສຽງປະຫລາດຂອງໂລຫະກະທົບກັນ. ມ້າແດງຄູ່ຫນຶ່ງແກ່ກະບະບັນທຸກມັນມາ, ແລ່ນເລັ່ງເຕັມຝີຕີນດ້ວຍຄວາມຕົກໃຈຢ້ານກົວ ນໍາສຽງອຶກກະທຶກ ທີ່ຕິດຕາມມາເບື້ອງຫລັງ. ຈັກຫວ່ານຫລ່ນລົງຕາມທາງດ້ອຍທີ່ປູດິນຊາຍ. ຈາກນັ້ນ ຈຶ່ງເຕັ້ນດ່ຽງສິ່ງສຽງດັງໄປຕາມຫົນທາງມຸ່ງສູ່ນິຄົມ. ອານໂຕນ ແຫລັດລົງຈາກອານັ່ງ, ຫລັງຈາກໂຍນເຊືອກບັງຫລນມ້າມາໃຫ້ຂ້າພະເຈົ້າ ແລ້ວມັນກໍແລ່ນຕິດຕາມຈັກຫວ່ານໄປ. ເປັນຫນ້າອັດສະຈັນທີ່ກາຣາບານິບ ກັບ ປຣີໂກດໂກ ຍັງບໍ່ໄດ້ຕົກອອກຈາກລົດ ແລະຍັງຄົງດຶງບັງຫລນໄວ້ໄດ້.

ອານໂຕນ ໃຊ້ຄວາມພະຍາຍາມສຸດຂີດຈຶ່ງຢຸດພາຫະນະປະຫລາດຄັນນີ້ໄດ້. ດ້ວຍນໍ້າສຽງແຫບສັ້ນຍ້ອນຄວາມຕື່ນເຕັ້ນ ແລະອິດເມື່ອຍ, ກາຣາບານິບເລົ່າເຫດການຕ່າງໆທີ່ຫາກໍຢຸດຕິລົງສູ່ຂ້າພະເຈົ້າຟັງດັ່ງນີ້:

-ພວກເຂົາກໍາລັງຂົນດິນຈີ່ຢູ່ໃນເດີ່ນ ທັນໃດນັ້ນ ກໍເຫັນຈັກຫວ່ານເຄື່ອນມາພ້ອມດ້ວຍຜູ້ຕິດຕາມຫ້າຄົນຮ່ຽ ຂະຫນາດຍັກນ້ອຍທ້ານັ້ນ. ພວກເຮົາພາກັນອອກໄປເບິ່ງ: ພວກເຈົ້າອອກຫນີຈາກຫນີ້ເດ! ພວກເຮົາບອກພວກເຂົາ, ພວກເຮົາແທ້ມືນໍາກັນສີ່ຄົນ... ພວກເຮົາສອງຄົນກັບ ໂຊບິດ... ແລ້ວແມ່ນໃຜອີກຜູ້ຫນຶ່ງ ຮຶ?

- ໂຊໂຮກາ, - ປຣີໂກດໂກ ບອກ.

- ໂຕເວົ້າກຶກແລ້ວ ໂຊໂຮກາ, ອອກໄປຈາກຫນີ້, ຂ້ອຍບອກ ພວກເຂົາອີກ "ພວກເຈົ້າບໍ່ຕ້ອງມາຫວ່ານອີ່ຫຍັງໃສ່ຫນ້ອີກແລ້ວ, ຊິເປັນແນວໃດກໍເປັນ". ແລະແລ້ວໃນທັນໃດນັ້ນ ກໍມີຫມໍຍັກນ້ອຍ ຄົນຫນຶ່ງ... ທ່າທາງມັນຄືພວກຍິບຊິ້ນລະ... ເຈົ້າເຂົ້າໃຈຕິວ່າ ຂ້ອຍຫມາຍວ່າແນວໃດ... ບັກເຜດນີ້... ຟາດແສ້ໃສ່ ໂຊບິດ ໂລດ ແຫ! ໂຍ້ວ ເປັນແນວນັ້ນ ໂຊບິດ ກໍເລີຍເອົາກໍ່ນ້ຳຟາດມັນຄືນ ບາດຫນຶ່ງ. ໃນທັນໃດນັ້ນ ບູຮຸນ ກໍລ້ວມາໃສ່ພ້ອມດ້ວຍຄ້ອນໃນມື, ຂ້ອຍຟ້າວດຶງເຊືອກມ້າພວກເຂົາມາ. ແຕ່ທ້າວປະທານ ທັນດຶງປາຍ ເສືອຂ້ອຍໄວ້...

- ປະທານໃດ?

- ກະຊິປະທານໃດອີກ? ກະທ້າວຫົວແດງ ລູກາເຊມືອໂນວິດ ຜູ້ດຽວນັ້ນແລ້ວ, ຈັ່ງຊັ້ນ ປຣີໂກດໂກ ກໍເລີຍລັດທາງຫລັງເພິ່ນ ສາບາດຫນຶ່ງ, ເກົ້າຫົວສັກໃສ່ກ້ອນຂີ້ໄກເລີຍ. ຂ້ອຍບອກ ປຣີ ໂກດໂກວ່າ, ໂດດຂຶ້ນຈັກຫວ່ານເລີຍ... ເປີດພວກເຮົາ... ໄວ... ພວກເຮົາພ້າວຫນີມາຫາຫມູ່ບ້ານ ກົງຊາຮອບກາພີ້ໂລດ, ຄົນພວກ ມັນພະຍາຍາມແລ່ນລັດທາງ, ໂຍ້ວຊິໄປຂ້າມໃສບັດນີ້?

ຂ້ອຍຕິນ້ຳໃຫ້ມັນແລ່ນຂ້າມຂົວມາສະບາຍ ມາຮອດພີ້... ຮອດ ຫົນທາງໃຫຍ່... ພວກເຮົາສາມຄົນ ຍັງຄ້າງຢູ່ພຸ້ນ, ຂ້ອຍຄຶດວ່າ ພວກມູຊິກຄົງຈັດການກັບພວກເຂົາພໍແຮງແລ້ວລະ.

ການາບານິບນັ້ນ ຍັງເຊັນທົດງຢູ່ດ້ວຍຄວາມປິ້ມປິຕິໃນໄຊຊະ ນະ. ປຣີໂກດໂກ ຜູ້ບໍ່ຫວັ່ນໄຫວແລະຍິ້ມເກັ່ງ, ພັນຢາກອກຫນຶ່ງ

ເລີຍຢູ່. ຂ້າພະເຈົ້າຄຶດວ່າດພາບອະນາຄົດໃນຂັ້ນຕໍ່ໄປ ດ້ວຍຫົວ ເລື່ອງປະຫວັດສາດດັ່ງນີ້ຄື: ຄະນະກຳມະການ, ການສືບປາກຄຳ ແລະການຕັດສິນໃຫ້ຄວາມຍຸຕິທຳ!

-ກູຈັ່ງແມ່ນຫນ່າຍພວກສູເດ້, ຫາແຕ່ເລື່ອງເດືອດຮ້ອນມາໃຫ້ ບໍ່ແລ້ວ!

ການາບານິບ ສະຖ້ຽງຫມິດແຮງຕໍ່ການສະແດງຄວາມບໍ່ພໍໃຈຂອງ ຂ້າພະເຈົ້າ.

-ແຕ່ແມ່ນພວກເຂົາໃຫ້ທີ່ລີ້ງມືກ່ອນ...

-ໄດ້ລະ... ເຂົ້າເມືອແລ້ວຈັ່ງວ່າກັນ.

ບູຮູນ ຕ້ອນຮັບພວກເຮົາຢູ່ປະຕູເຂົ້ານິຄົມ, ຫນ້າຜາກຂອງມັນ ເປັນຮອຍຊ້ຳແຫລ້ວິງໃຫຍ່, ພວກເດັກນ້ອຍຫຸ້ມລ້ອມມັນທັ້ງຫົວ ໂຄບໆ, ໂຊບິດກັບໂຊໂຮກາ ຈັດການລ້າງຫນ້າລ້າງມືຢູ່ໃກ້ໆກະໂລ່ ນ້ຳ.

ການາບານິບ ດຶງບາໃຫ່ລ ບູຮູນ ໄວ້:

-ໂຫ້! ມຶງລອດມືພວກເຂົາມາໄດ້ຫວະ? ເກັ່ງຫລາຍ!

-ທຳອິດພວກມັນແລ່ນມານຳຈັກຫວ່ານ ແຕ່ຕໍ່ມາພໍເຫັນວ່າ ເຮັດຫຍັງບໍ່ໄດ້ແລ້ວ ກໍເລີຍຫັນມາໃສ່ພວກເຮົາ... ໂຍ້ວ ພວກ ເຮົາກໍໃສ່ຕີນຫມາແລ່ນໂລດແຫລ້ວ.

-ແລ້ວພວກມັນເດ້ຢູ່ໃສດອນີ້?

-ພວກເຮົາເອົາເຮືອຂ້າມນ້ຳມາແລ້ວ ພວກມັນເລີຍພາກັນຄ້າງ ຢູ່ຝັ່ງນັ້ນແຫລ້ວ, ຮ້ອງດ່າຫວາກໆນຳຫລັງ, ພວກເຮົາບໍ່ສົນດອກ... ປະພວກເຂົາໄວ້ນັ້ນລະ...

- ເດັກນ້ອຍນິຄົນເຮົາຍັງເຫລືອຢູ່ພຸ້ນນີ້ບໍ?

- ພວກເດັກນ້ອຍນີ: ໂຕສກາ ກັບອີກສອງຄົນພວກນີ້... ບໍ່ມີ ໃຜແຕະຕ້ອງດອກ.

ຊື່ອໂມງຫນຶ່ງຕໍ່ມາ ລູກາ ເຊມີອໂນວິດ ກັບຊາວບ້ານອີກສອງ ຄົນ ມາຫາພວກເຮົາຢູ່ນິຄົມ. ພວກເດັກນ້ອຍໃຫ້ການຕ້ອນຮັບ ພວກເຂົາເປັນຢ່າງດີ.

- ມາເລື່ອງຈັກຫວ່ານຫວະ?

ຢູ່ໃນຫ້ອງການຂອງຂ້າພະເຈົ້າມີກຸ່ມຄົນສະຫລອກກອກ ຫລາຍ ຈົນເກືອບເຫນັງໄປມາບໍ່ໄດ້. ສະຖານະການເປັນຕາອຸກໃຈສົມ ຄວນ.

ລູກາ ເຊມີອໂນວິດ ນັ່ງລົງເທົ້າຕັ່ງຫນ່ອຍຫນຶ່ງ ແລ້ວເວົ້າວ່າ:

- ເອີ້ນພວກເດັກນ້ອຍທີ່ຂ້ອຍກັບຄົນຂ້ອຍອີກສອງຄົນ ມາ.

- ລູກາ ເຊມີອໂນວິດ, ຂ້າພະເຈົ້າເວົ້າຂຶ້ນ, - ຖ້າຫາກວ່າມີ ໃຜຕ່ອຍຕີເຈົ້າແທ້ ເຊີນເຈົ້າໄປຟ້ອງຮ້ອງທາງໃດກໍເຊີນໂລດ. ມາ ຮອດປານນີ້ແລ້ວຂ້ອຍບໍ່ເຫັນໃຜມາດອກ, ບອກຂ້ອຍມາເລີຍວ່າ ເຈົ້າຕ້ອງການຫຍັງອີກແລະເຈົ້າມາຫານີ້ດ້ວຍກິດທຸລະຫຍັງ?

- ເຈົ້າປະຕິເສດ ບໍ່ເອົ້ນພວກນັ້ນມາຊັ້ນຫວະ?

- ເອີ, ຂ້ອຍປະຕິເສດ.

- ອ່າ... ປະຕິເສດນໍ! ຊັ້ນກະຊິໄດ້ເວົ້າກັນຢູ່ບ່ອນໃຫມ່.

- ຕົກລົງ.

- ແລ້ວແມ່ນໃຜຊິເອົາຈັກຫວ່ານເມື່ອສົ່ງລະ?

- ເມື່ອສົ່ງໃຜ?

- ສົ່ງເຈົ້າຂອງມັນຊັ້ນຕ່ວາ.

ລາວຊົ້ມໃສ່ຊາຍຜ້ວກ່ຳຄົນຫນຶ່ງ ທ່າທາງຄ້າຍຄົນຍິບຊີ, ຜົມ ກູດຫຍອງຄົງແມ່ນຊາຍຄົນນີ້ເອງທີ່ກາຣາບານິບ ເວ້ົາຮອດ.

- ເຈົ້າເປັນເຈົ້າຂອງຫວະ? ຂ້າພະເຈົ້າກາມຫມໍ.

- ເອ... ແມ່ນລະ!

- ດີແລ້ວ ຈັ່ງຊັ້ນກະດາຍ, ເປັນແນວນີ້ເດ໊, ຈັກຫວ່ານຂອງ ເຈົ້າຫັ້ນຂ້ອຍຊິໄດ້ສົ່ງມັນໄປໃຫ້ຕ່ຳຫລວດເມືອງເດ໊ ໃນນາມວ່າເປັນ ຂອງຍຶດໄດ້ໃນເວລາທີ່ມັນມາຕົກຢູ່ໃນທ່ົງນາຂອງຜູ້ອ່ືນ ຢ່າງບໍ່ໄດ້ຮັບ ອະນຸຍາດ, ຂໍໂທດ. ແຈ້ງຊ່ືຂອງເຈົ້າມາດຸ.

- ຊ່ືຂ້ອຍຫວະ? ເກຣຊານີ ໂອໂນປຣີ. ເຈົ້າເວ້ົາວ່າທ່ົງນາ ຂອງຜູ້ອ່ືນ... ແມ່ນຂອງຜູ້ອ່ືນທາງໃດ? ມັນແມ່ນທ່ົງຂອງຂ້ອຍ ເອງ, ມັນເປັນຂອງຂ້ອຍມາດົນແລ້ວ.

- ເວລານ້ີ ບໍ່ແມ່ນເວລາທ່ີພວກເຮົາຈະມາເວ້ົາກັນເກ່ືງເລ່ືອງນ້ີ. ດ່ວນ້ີ ພວກເຮົາຈະຮ່ວງຄະດີພ້ອງເລ່ືອງລະເມີດກຳມະສິດ ແລະ ການໃຊ້ກຳລັງຕ່ໍເດັກນ້ອຍໃນນິຄົມທ່ີກຳລັງເຮັດວຽກຢູ່ທ່ົງນາ.

ບູຮູນ ກ້າວອອກມາທາງຫນ້າ.

- ຫມໍນ້ີລະມັນຕ່ີຂ້ອຍຈົນເກ່ືອບຕາຍ, - ເຂົາເວ້ົາຂ້ຶນ.

- ມ່ືງເຂ້ົາມາສ່ືນເຮັດຫຍັງລະ?... ນ້ຳຫນ້າຈ່ັງມ່ືງກູຊິຕ່ີໃຫ້ເສຍ ມ່ືເຮັດຫຍັງ!

ເມ່ືອໃຊ້ກ້ອຍຄຳເວ່ົານ້ີໃສ່ກັນ ການສົນທະນາກ່ໍຍຶດເຢ້ືອອອກ ໄປ. ຂ້າພະເຈົ້າລ່ືມໂມງກ່ືນເຂ້ົາທ່ວງຕ່ໍໃສ່ຮອດຍາມກ່ືນແລ້ວ, ສ່ວງ ກະແຫລ່ງສັນຍານ ເວລາອັດການສັນຈອນພາຍໃນນິຄົມດ່ັງສຸດລ່ິງ

ແລ້ວ ແຕ່ການເຈລະຈາຍັງຄົງດຳເນີນຕໍ່ໄປຢູ່, ລະຫວ່າງພວກເຮົາ ກັບຊາວບ້ານນັ້ນ ບາງເທື່ອກໍແມ່ນຂໍ້ສະເໜີແລກປ່ຽນກັນຢ່າງສັນຕິ ບາງເທື່ອກໍຮຸນແຮງຂົ່ມຂູ່ກັນ, ບາງເທື່ອ ກໍເຄັ່ງຂຶມໜ້າຄຶດ, ບາງ ເທື່ອກໍເປັນໜ້າຢາກຫົວ.

ຂ້າພະເຈົ້າຍືນຢັນຄວາມເກົ່ຍ່າງໜັກແໜ້ນ, ປະຕິເສດບໍ່ ຍອມສົ່ງຈັກຫວ່ານ ແລະຮຽກຮ້ອງໃຫ້ຂຸນເອກະສານຮ່າງຄະດີຟ້ອງ ຮ້ອງ. ໂຊກດີແຕ່ວ່າ ພວກຊາວນານັ້ນບໍ່ໄດ້ຮັບບາດເຈັບມີຮ່ອງຮອຍ ຂອງການຊົກຕ່ອຍກັນເລີຍ ສ່ວນວ່າພວກເດັກນ້ອຍນັ້ນ ພວກເຂົາ ມີຮອຍເປີກຮອຍເລີກຊ້ຳດຳຢູ່ທົ່ວໜ້າທົ່ວຕາ. ໃນທີ່ສຸດ ຊາໂດ ຮອບ ກໍປະກາດຕັດສິນກໍລະນີພິພາດ, ມັນເອົາກຳປັ້ນທຸບໂຕະແລ້ວ ເວົ້າສັ້ນໆດັ່ງນີ້:

-ພໍ່ຕູ້ເອີ... ເຊົາເວົ້າໄດ້ແລ້ວເລື່ອງນີ້! ດິນເປັນຂອງພວກ ເຮົາ, ທາງທີ່ດີພວກເຈົ້າບໍ່ຄວນມາຈຸ່ນວາຍກັບພວກເຮົາ, ພວກ ເຈົ້າບໍ່ຕ້ອງມາຍຸ່ງບດິນຂອງພວກເຮົາອີກ, ພວກເຮົາມີນຳກັນ ๕๐ ຄົນ ລ້ວນແລ້ວແຕ່ເດັກຂາດທັງນັ້ນ.

ລູກາ ເຊມືອໂນວິດ ຄຶດຢູ່ເທົ່ງເຕີບ, ຈົນໃນທີ່ສຸດ ກໍຍົກເອົາ ນ້ອມືຮຶດຫນອດ ເວົ້າສຽງຫມຶບໆວ່າ:

-ເອົາລະ... ຕາມໃຈພວກເຈົ້າສາ, ແຕ່ວ່າຢ່າງຫນ້ອຍກໍຄວນ ຈ່າຍຄ່າໄກແດ່.

-ບໍ່, ຂ້າພະເຈົ້າບອກສຽງກະແດ້ງ, -ຂ້ອຍໄດ້ເຕືອນເຈົ້າ ແລ້ວ.

ຄວາມມືດງຽບອີກຄັ້ງໃຫມ່ຄອບງຳບັນຍາກາດ.

- ເອ້ີ... ຄັນຊັ້ນກະສິ່ງຈັກຫວ່ານສາ.

- ຂ້ອຍຫາກຊິສິ່ງ, ກ້າວ່າເຈົ້າຊິເຊັ່ນຫນັງສືຮັບຮູ້ກ່ອນ.

- ຕົກລົງ... ເອົາມາຂ້ອຍຊິເຊັ່ນ.

ເມື່ອເກີ່ງລະດູໃບໄມ້ຫລົ່ນ ພວກເຮົາກໍໄດ້ຫວ່ານແນວເຂົ້າໂອ໊ດ ໃສ່ທົ່ງນານິຄົມໃຫມ່ຕາມວາດ. ຫມົດທຸກຄົນກາຍເປັນນັກກະສິກຳ ໄປໃນຕົວ. ກາລິນາ ອີວານໂນວິດ ຮູ້ເລື່ອງປູກຝັ່ງບໍ່ດີປານໃດ ແຕ່ຜູ້ ອື່ນໆລ້ຳຢ່ຳຂີ້ຮ້າຍກວ່າລາວອີກ ແຕ່ຫມົດທຸກຄົນ ກໍພໍໃຈທີ່ໄດ້ເຮັດ ວຽກໄດ້ຈັບບາຍຄັນໄຖແລະຢູ່ນຳຈັກຫວ່ານ ນອກຈາກ ບຮາເຊັ່ນໂກ ຜູ້ດຽວ ຫມໍນີ້ອຸກໃຈຍ້ອນຄວາມຫວາງຫ່ວາງມ້າ ເຂົາອຶດສາຄົນອື່ນໆ ດ່າວ່າທົ່ດິນ ແນວເຂົ້າໂອ໊ດ ແລະຄວາມຟົດຟື້ນຫ້າວຫັນຂອງພວກ ເຮົາ.

- ປູກເຂົ້າບະເລແລ້ວກໍຍັງບໍ່ພໍ ຍັງຕ້ອງປູກເຂົ້າໂອ໊ດອີກ!

ມາເກີ່ງເດືອນຖຸລາ ທົ່ງນາກ້ວາງ ຂ ເດີເຊຍຕິນຂອງພວກເຮົາ ກໍຂຽວອຸ່ມທຸ່ມໄປດ້ວຍກໍເຂົ້າອ່ອນ. ກາລິນາ ອີວານໂນວິດ ເອົາສົ້ນ ຍາງໄມ້ຄ້ອນເທົ້າຂອງລາວ ຊີ້ໄປຍັງສຸດຂອບຟ້າ ທັງເວົ້າວ່າ:

- ໂຕຮູ້ບໍ່... ຟາກພຸ້ນຄວນປູກຫມາກກ່ຳໃສ່ ຫມາກກ່ຳກໍດີ ກັນເດ໊!

ມ້າບັກແດງກັບອີ່ໂຈນ ເຮັດວຽກຫນັກຫລາຍ ເພື່ອໄຖດິນກຽມ ກ້າລະດູບານໃຫມ່ໃຫ້ຮຽບຮ້ອຍ ຈັ່ງຊັ້ນ ຊາໂດຣອບ ຈຶ່ງກັບຄືນມາ ຫໍພັກ ດ້ວຍທ່າທີເມື່ອຍອ່ອນ ຕີນຕີວຫມອງຫມົ່ນດ້ວຍຝຸ່ນດິນ ເຂົາຈົ່ມວ່າ:

- ຈັ່ງແມ່ນເຮົາເບື່ອເວ້ີ! ວຽກຊາວນານ້ີ ຫນັກສົມຄວນ ເຮົາ ຊິກັບເມືອຢູ່ໂຮງຊ່າງຕີເຫລັກພຸ້ນດອກ.

ເມື່ອວຽກງານຂອງພວກເຮົາ ດຳເນີນມາໄດ້ປະມານເຄິ່ງຫນຶ່ງ ແລ້ວ ຫົມະກໍໂຮຍຮ້າຍມາຢ່າງບໍ່ຄາດຝັນ, ພວກເຮົາຄຶດວ່ານີ້ ແມ່ນບັ້ນເລີ່ມຕົ້ນທີ່ພໍສູ້ທົນໄດ້ຢູ່.

ບົດທີ ๑๘

ບຮາເຊັນໂກ ກັບ ຜູ້ກວດກາການສະບຽງ

ການປູກຝັງຂອງພວກເຮົາຂະຫຍາຍຕົວເປັນກ້າວໆຢ່າງຫນ້າອັດ ສະຈັນ ແລະເຕັມໄປດ້ວຍຂໍ້ທົດສອບ. ເປັນເລື່ອງຫນ້າອັດສະຈັນຢ່າງ ຫນຶ່ງ ເມື່ອ ກາລິນາ ອິວາໂນວິດ ປະສົບຄວາມສຳເລັດ, ຫລັງ ຈາກພະຍາຍາມຂ້ຽວຂອດຜູ້ຄົນທັ້ງຫລາຍມາດົນແລ້ວ, ໄດ້ຮັບການ ຈິວແມ່ແກ່ຕົວຫນຶ່ງ ໃນໂອກາດທີ່ມີການສະສາງເລື່ອງໃດເລື່ອງຫນຶ່ງ ຕາມສຳນວນຂອງລາວເອງ, ຈິວແມ່ຕົວນີ້ "ເປັນຫມັນມາແຕ່ເກີດ", ເປັນເລື່ອງຫນ້າອັດສະຈັນອີກເລື່ອງຫນຶ່ງ ທີ່ພວກເຮົາໄດ້ຮັບມ້າແມ່ ດຳໂຕຫນຶ່ງຈາກສະຫາບັນກະສິກຳອ້ອຍຕ້ອຍ ບ່ອນຫນຶ່ງຊຶ່ງບໍ່ມີຫຍ້າ ກ່ຽວພັນກັບພວກເຮົາພໍຫນ້ອຍ; ມ້າຕົວນີ້ບໍ່ເກົ້າບໍ່ຫນຸ່ມໄປກວ່າຈິວ ມັນທັ້ງທ້ອງໃຫຍ່, ໄອແຄ້ກໆ ແລະຂີ້ຄ້ານເປັນທີ່ສຸດ; ກອງນ້ອຍ, ກອງນທຽມຈິວກະທັ້ງຮອດກອງນປະເພດສີ່ລໍ້ ກໍປາກົດຕົວເຂົ້າມາຢູ່ ໃນນິຄົມພວກເຮົາຢ່າງຫນ້າອັດສະຈັນ. ໃນເວລານັ້ນກອງນ ສີ່ ລໍ້ໃຊ້ ມ້າຄູ່ທຽມນັ້ນງາມພິລຶກ ໃນສາຍຕາຂອງພວກເຮົາ ທັ້ງນ່ັງສະບາຍ ອີກ ແຕ່ບໍ່ມີສິ່ງມະຫັດສະຈັນໃດໆ ສິ່ງມ້າຄູ່ທຽມທີ່ເຫມາະສົມມາໃຫ້ ພວກເຮົາເລີຍ.

ອານໂຕນ ບຮາເຊັນໂກ ຫົວຫນ້າຄົນລ້ຽງມ້າຂອງພວກເຮົາ

ຮັບຕຳແໜ່ງນັ້ຕ່ຈາກກູດ ເຊົ່ຍ້າຍໄປຢູ່ພະແນກຊ່າງເກືບ, ເຂົ້າ ເປັນບ່າວນ້ອຍຜູ້ເຂັ້ມແຂງທະນົງຕົວອາລົມສະດຸ້ງໄວ, ຮູ້ຈັກຜ່ານຜ່າ ໄລຍະຫຍຸ້ງຍາກ. ເມ່ືອໃດ ເຂົ້າຫາກບ້ງເອ່ີນຂ້ຶ້ນໄປນ່ັ້ງຢູ່ເທ່ິງຕ່ັ້ງຜູ້ ຂ້ັບ ກ່ອງແຫລ້ມງ່ານທ່ຽມດ້ວຍມ້ານ້ັກແດງຂ່ຍ່ານ່ວຽງໂຍກກ້ັບມ້າ ແມ່ຂ່າດ້ຽງໂຕຕ່ຳເຕ້ຍ ແລ້ວ ອ່ານໂຕນ ກໍ່ຂະຫນ່ານນ່ານໃຫ້ມ້ັນຍ່າງ ບ່ຍຸຕິທຳຈ້ກຫນ້ອຍວ່ານ່ີ້ໂຈນ. ມ້ັນຍ່າງເຕ່ະສ່ະດຸດໄປແຕ່ລ່ະກ້ານ, ບ່ານ່ເທ່ືອລ້ົມຟຸບລົງດ້ນ ເຮ້ັດໃຫ້ຂ່ະບວນເດ້ນທ່ານ່ຂອງພວກເຮ່ົາຢຸດ ສ່ະງ້ກລົງກ່ານ່ເມ່ືອງ ທ່ານ່ກ່ານ່ສ່ານ່ຕ່ານ່ສອດຮູ້ສອດເຫ້ັນຂອງຄ້ນຂ້ັບ ກ່ອງນ່ືນໆກ້ັບເດ້ັກນ້ອຍແຄມທ່ານ່. ຫລ່ານ່ເທ່ືອ ອ່ານໂຕນ ບ່ໍ່ອ່ິດ ທ້ນຮ້ັບຟ້ງສ່ານ່ງ່ຫ້ວເຍ່ະເຍ້ີ້ຍເຫລ່ົ່ານ້ັ້, ເຂ່ົ້າຈ່ົ່ງປ່ະກ່ານ່ສ່ົ່ງ່ານ່ກ້ັບ ນ້ັກຊ່ົ່ມຜ້ັ້ບ່ໍ່ໄດ້ເຊ່ົ່ນ່ານ່ຍ່ານ່ຮ້ານ່ຮ່ົ້ນຈ່ົ່ງຈ້ັ, ສ່ົ່ງ່ດ້ັ່ງ່ກ່ານ່ວ່ຍ່ົ່ເຮ້ັດໃຫ້ ຄ່ອກ່ານ່ຂອງ່ນ່ົ່ດ່ນ້ັ້ອ່ກ່ົ່ນ່ົ່ຊ່ົ່ສ່ານ່ງ່ແ່ຕ່ກ່ານ່ຕ່ານ່ງ່ຈ່ານ່ກ່ານ່ໝູ່່ໄປ່ອ່ົ່ກ.

ອ່ານໂຕນ ບ່ຮ່ານ່ເຊ້ັນ່ໂກ ນ້ັກ່ານ່ຕ່ານ່ອ່ຍ່ຕ່ົ່ເປ້ັນ່ພ່ົ່ເ່ສ່ດ, ສ່ານ່ມ່ານ ເຂ້ົ້ານ່ຮ່ານ່ມ່ໃ່ນ່ກ່ານ່ຜ່ົ່ດ່ກ່ານ່ງ່ດ່ານ່ວ່ກ່ານ່ກ້ັ່ນ່ໃ່ນ່ທຸ່ກ່ຕ່ົ່ໂ່ອ່ກ່ານ່ ທ່ົ່ານ່ສ່ານ່ມ່ານ ເຮ້ັດໃຫ້ຄູ່່ສ້ົ່ດ່ຕຸ່່ຈ່ົ່ນ່ມຸ່່ນ່ຍ່ານ່ງ່ງ່ານ່ຍ່ດ່ານ່ຍ ເ່ພ່ານ່ະ່ໃ່ນ່ກ່ານ່ດ່ອ່ນ່ຄ່ານ່ລ່ົ່ມ ເຂ່ົ້ານ່ ຮູ້່ຈ້ກ່ໃ່ຊ້ຄ່ຳ່ສ້ົ່ບ່ເ່ຍ່ານ່ະ່ເ່ຍ້ີ້ຍ່ຊ່ະ່ນ່ິ່ດ່ອ້ັ່ດ່ກ້ັ່ນ່ໂ່ລ່ດ່ຍ່ານ່ງ່ຫ່ລ່ານ່ງ່ຫ່ລ່ານ່ຍ ເຮ້ັດ ສ່ານ່ງ່ສ່ຳ່ນ່ານ່ງ່ຂ້ົ້ນ່ລ່ົ່ງ່ຍ່ອ່ກ່ລ້ົ່ຍ່ານ່ງ່ຄ່ອ່ງ່ຄ່ື.

ເຂ່ົ້ານ່ບ່ໍ່ແ່ມ່ນ່ເດ້ັກ່ປ່ະ່ເ່ພ່ດ່ໄ້ຮ່ຍ່ານ່ດ່ເ່ລ່ຍ. ພ່ໍ່ຂ່ອ່ງ່ເຂ່ົ້ານ່ເ່ປ້ັ່ນ່ຊ່ານ່ງ່ເຮ້ັດ ເຂ້ົ້ານ່ຈ່ີ່ຢູ່່ໃ່ນ່ເ່ມ່ືອ່ງ, ແ່ມ່ກ່ໍ່ເ່ຄ່ີ່ຍ່ຢູ່່ຮ່ວ່ມ່ກ້ັ່ນ່ມ່ານ່ແ່ລ້ວ; ແ່ລ່ະ່ເ່ຂ່ົ້ານ່ຍ້ັ່ງ່ເ່ປ້ັ່ນ ລູ່່ກ່ຊ່ານ່ຍ່ດ່ານ່ວ່ຂ່ອ່ງ່ພ່ໍ່ແ່ມ່ອ່ົ່ກ່ຊ້ຳ. ນ້ັ່ບ່ແ່ຕ່ເ່ລ່ົ່ມ່ຮູ້່ຈ້ກ່ຄ່ວ່ມ່ມ່ານ່ອ່ານ່ໂ່ຕ່ນ ກ່ໍ່ຄ່ົ່ດ່ເ່ບ່ົ່ອ່ຫ່ນ່ານ່ຍ່ຄ່ອ່ບ່ຄ່ົ່ວ່ໂ່ລ່ດ, ເ່ຂ່ົ້ານ່ກ້ັ່ນ່ມ່ານ່ເ່ຮ່ືອ່ນ່ພ່ໍ່ພ່ານ່ງ່ແ່ຕ່ເ່ພ່ົ່ອ່ມຸ່່ດ ຫ້ວ່ນ່ອ່ນ່ເ່ທ່ົ່ານ້ັ້ນ, ເ່ຂ່ົ້ານ່ຜຸ່່ກ່ພ້ັ່ນ່ຮ້ັ່ກ່ແ່ພ່ງ່ກ້ັ່ນ່ພ່ວ່ກ່ເ່ດ້ັ່ກ່ນ້ອ່ຍ່ພ່ະ່ເ່ນ

ຈອນ ແລະຂີ້ກະໂຫຍໃນເມືອງ. ເຂົາເດັ່ນຂຶ້ນຕ່າງຈາກຜູ້ອື່ນໆ ຍ້ອນ ຜ່ານການພະຈົນໄພແບບສ່ຽງອັນຕະລາຍ ຫລາຍແບບຫລາຍແນວ ທ້າທ້າສິນໃຈນຳ, ເຄີຍລອດມືຕຳຫລວດມາຫລາຍເທື່ອ ແລະໃນ ທີ່ສຸດ ກໍມາຈົນຕາແຈຢູ່ໃນນິຄົມຂອງພວກເຮົາ. ເຂົາເປັນບ່າວນ້ອຍ ເຈົ້າຊູ້ອາຍຸບໍ່ກາຍ ໑໕ ປີ, ຜິວຍິກຫຍອງ, ແກ່ນຕາສີຟ້າ, ຮູບ ຮ່າງສົມສ່ວນດີ. ອານໂຕນ ນັກມືຫມູ່ຄູ່ທີ່ສຸດ, ມັນບໍ່ສາມາດຢູ່ຜູ້ ດຽວແມ່ນແຕ່ບຶດຫນຶ່ງຄາວດຽວ, ນອກນີ້ຍັງເຄີຍຮຽນຫນັງສືມາ ແລ້ວ, ສາມາດເລົ່ານະວະນິຍາຍຜະຈົນໄພຫລາຍເລື່ອງໄດ້ກັບປາກ, ແຕ່ບໍ່ຕ້ອງການສຶກສາຮ່ຳຮຽນຫຍັງຕື່ມອີກເລີຍ ເຖິງຂະຫນາດວ່າ ຂ້າພະເຈົ້າຕ້ອງໃຊ້ກຳລັງບັງຄັບໃຫ້ມັນນັ່ງລົງຕັ່ງໃນຫ້ອງຮຽນ. ທຳ ອິດ ມັນລັກຫນີຈາກນິຄົມເລື້ອຍໆ ແຕ່ຫວນກັບຄືນມາໃນສອງສາມ ມື້ ໂດຍບໍ່ສະແດງວ່າຕົນເອງມີຄວາມຜິດພໍຫນ້ອຍ. ນອກນີ້ມັນຍັງ ໄດ້ພະຍາຍາມຕໍ່ສູ້ຕ້ານກັບສັນຊາດຕະຍານພະເນຈອນຂອງມັນ ໂດຍ ຮ້ອງຂໍນຳຂ້າພະເຈົ້າວ່າ:

-ອານໂຕນ ເຊມືອໂນວິດ, ຈັດການກັບຂ້ອຍແຮງໆແດ່ແມ້ ບໍ ຊັ້ນຂ້ອຍມືຫວັງກັບໄປເປັນຄົນພະເນຈອນຄັກໆຕ່ວາ.

ມັນບໍ່ເຄີຍລັກຫຍັງຈັກເທື່ອ ເມື່ອຢູ່ໃນນິຄົມ, ມັກປ້ອງກັນ ຄວາມຍຸຕິທຳ ແຕ່ຫາກບໍ່ສາມາດເຂົ້າໃຈຕັກກະສາດແຫ່ງລະບຽບວິ ໄນ ເທົ່າທີ່ມັນຍອມຮັບນັ້ນແມ່ນແຕ່ພໍພຽງ ເມື່ອໃດມັນເຫັນວ່າສອດ ຄ່ອງກັບສະພາບການໃດຫນຶ່ງເປັນພິເສດເທົ່ານັ້ນ. ມັນບໍ່ຍອມຮັບຮູ້ ພັນທະໃດໆກິດລະບຽບໃດໆຂອງນິຄົມພວກເຮົາ ແລະທ້າບໍ່ເຊື່ອງຳ ອີກ. ມັນເກງກົວຂ້າພະເຈົ້າຫນ້ອຍຢູ່ແຕ່ບໍ່ທົນຟັງຂໍ້ຕັກເຕືອນຂອງ

ຂ້າພະເຈົ້າຈົນສຸດກົກສຸດປາຍຈັກເທື່ອ, ມັກເວົ້າຕັດຂ້າພະເຈົ້າດ້ວຍ ຖ້ອຍຄວາມລ່ວນໄຫລໂດຍບໍ່ພາດໂອກາດຕູ່ຫາດ່າວ່າພວກສັດຕູຂອງ ມັນ, ຕູ່ວ່າພວກເຂົາມາລຸບແຂ່ງເລຍຂ້າພະເຈົ້າເປັນນັກໃສ່ຮ້າຍ ປ້າຍສີ, ຜູ້ໃຮ້ສະມັດກະພາບ, ຊູ່ເຂັນສັດຕູຜູ້ຂໍມາປະຈັນຫນ້າດ້ວຍ ໄມ້ແສ້, ອອກຫນີຈາກຫ້ອງການຂອງຂ້າພະເຈົ້າໄປດ້ວຍຄວາມອຸ່ມ ຮ້ອນແຄ້ນເຄືອງ ແລະອັດຝາປະຕູເຂົ້າແຮງໆ. ກັບພວກຄູສອນນັ້ນ ມັນກໍເຮັດກ່ອຍໃສ່ຢ່າງບໍ່ຫນ້າໃຫ້ອະໄພ. ແຕ່ຊ້ອນເຊື່ອງຢູ່ໃນຄວາມ ກ່ອຍເກື່ອນອັນນີ້ ກໍຫາກມີສະເຫນແນວໃດແນວຫນຶ່ງ ຊິ່ງເຮັດ ໃຫ້ພວກຄູສອນບໍ່ຄົງໃຫ້ມັນ. ນ້ຳສຽງເວົ້າຂອງມັນບໍ່ດ້ຳດ້ານຫລືສະ ແດງຄວາມເປັນປໍລະປັກ, ໃນນັ້ນມັນມີທຳນອງເວົ້າອັນເຕັມປ່ຽມໄປ ດ້ວຍມະນຸດສະທຳ ແລະມັນກໍບໍ່ຜິດກຽງກັບຫມູ່ດ້ວຍເລື່ອງທີ່ເຫັນແກ່ ສ່ວນໂຕຈັກເທື່ອ.

ບໍ່ດົນ ຄວາມຮັກທີ່ມັນມີຕໍ່ມ້າ ແລະຕໍ່ອາຊີບລ້ຽງມ້າກໍກາຍເປັນ ຫລັກການຊີ້ນຳຄວາມປະພຶດຂອງມັນ. ເປັນເລື່ອງຍາກບໍ່ຫນ້ອຍທີ່ ຈະເຂົ້າໃຈວ່າ ມັນເກີດຄວາມນິຍົມຊົມຊອບອັນນີ້ມາແຕ່ທາງໃດ. ດ້ວຍການພັດທະນາຕົນເອງຂອງມັນ ບຮາເຊັນໂກ ສະຫລາດສະ ຫລົວກວ່າເດັກນ້ອຍໃນບົດສ່ວນຫລວງຫລາຍ, ມັນຮູ້ຈັກໃຊ້ຄຳ ສັບເຊັ່ນຄົນໃນເມືອງເວົ້າກັນ ເຖິງແມ່ນວ່າໃນບາງໂອກາດ ມັນມັກ ສະແດງໂອຫາມໃຊ້ຄຳຜະຫຍາຊາວອູກຣາອົນປົນອອກມາຢ່າງເຫລືອ ເຟືອແດ່ ກໍແມ່ນຍ້ອນຄວາມຢາກອວດອ້ຳຂອງມັນ. ມັນພະຍາຍາມ ນຸ່ງເຄື່ອງສະອາດຮຽບຮ້ອຍ, ອ່ານຫນັງສືຫລາຍ ແລະມັກເວົ້າເຖິງ ປຶ້ມທີ່ອ່ານແລ້ວ, ແຕ່ສິ່ງດ່ຳກ່າວຊ້ຳບໍ່ກ່ວາດຶງເອົາມັນຫນີຫ່າງຈາກ

ຄອກມ້າເລີຍ, ຍາມໃດກໍປັດກວາດຂີ້ມ້າ, ເອົາມ້າທຽມກອງນ, ແກ້ມ້າອອກ, ເຊັດຖູເຊືອກບ້ງຫນ ຫລືເຊືອກທຽມກອງນ, ບໍ່ວ່າອາກາດຈະເປັນແນວໃດ ມັນເປັນຜູ້ຂັບກອງນເຂົ້າໃນເມືອງ ຫລືໄປນິຄົມໃຫມ່, ສ່ວນຫລວງຫລາຍມັນທ້ອງໂຄ່ງເພາະມາບໍ່ທັນກິນເຂົ້າຈັກເທື່ອ ບໍ່ວ່າກິນທ່ຽງຫລືກິນແລງ, ກ້າຫາກວ່າບໍ່ມີໃຜຈ່ຽງອັດຕາຂອງມັນໄວ້ໃຫ້ ມັນກໍຮອດບໍ່ຈົ່ມວ່າເວົ້າຫາແຕ່ຢ່າງໃດ.

ຫນ້າທີ່ປະຈຳຢູ່ຄອກມ້າຂອງມັນ ມັກຂັດແລະປະທະກັບຜູ້ອື່ນໆ ຢ່າງບໍ່ສຸດສ້ຽງເປັນເຊັ່ນ ກາລິນາ ອີວາໂນວິດ, ກັບພວກຊ່າງຕີເຫລັກ, ພວກຍາມສາງ ແລະທີ່ພາດບໍ່ໄດ້ກໍແມ່ນກັບທຸກໆຄົນທີ່ສະເອີຫນ້າຢາກເອົາມ້າໄປທຽມກອງນ. ມັນຈະຍອມເອົາມ້າໄປທຽມກອງນ ກໍແຕ່ເມື່ອໄດ້ຮ້ອຍວ່າຍຶດຍາວຕູ່ຫາວ່າຜູ້ຄົນເຫລົ່ານັ້ນໂຫດຮ້າຍຕໍ່ສັດທັ້ງເວົ້າລົ້ມຄົນເກົ່າຕອນມ້າບັກແດງ ຫລືບັກນ້ອຍກັບຄືນມາຄອກດ້ວຍຫນ້າຄໍກະຫລອກເຫລົ້ນ; ມັນຮຽກຮ້ອງເອົາເຟືອງແທ້ງຫຍ້າແທ້ງຫລາຍຂຶ້ນ ແລະເຫລັກເພື່ອເຮັດປອກຕີນໃຫ້ມ້າ. ບາງເທື່ອພວກເຮົາບໍ່ສາມາດເດີນທາງອອກຈາກນິຄົມໄດ້ຍ້ອນພໍພຽງແຕ່ວ່າ ເພິ່ນຊອກຫາ ອານໂຕນ ກັບມ້າບໍ່ເຫັນ, ບໍ່ຮູ້ວ່າມັນພາມ້າໄປທາງໃດ. ຫລັງຈາກສິ່ງສະມາຊິກນິຄົມເກືອບເຄິ່ງຫນຶ່ງອອກຊອກດົນເຕີບ ຈຶ່ງໄປພົ້ນກັບມ້າ ບາງເທື່ອກໍຢູ່ເຄຫາ ແຕຣບແກ ຫລືບໍ່ກໍຢູ່ໃນທົ່ງຫຍ້າອ້ອມແອ້ມນັ້ນເອງ.

ຢູ່ອ້ອມຂ້າງ ອານໂຕນ ມັກມີເດັກນ້ອຍປະເພດຫລິ້ນສະເຫນ່ງ ດຽວກັບມັນເອງ ທີ່ຫລິ້ນຮັກມ້າຂອງຕົນຢູ່ນຳປະມານສອງສາມຄົນສະເຫມີ. ອານໂຕນສາມາດຈັດຕັ້ງພວກເຂົາໃຫ້ມີລະບຽບເຄ່ັ່ງຄັດຢູ່ສະ

ເຫມີ ຈັ່ງຊັ້ນຄອກມ້າຈຶ່ງສະອາດອ່ຽມເປັນລະບຽບດີທຸກເວລາ: ພື້ນແປນກ້ຽງ, ສາຍເຊືອກຫ້ອຍຢູ່ເປັນບ່ອນ, ກະບະກອງນຈອດເປັນກັນແກ່ວຢ່າງງົດງາມ, ສ່ວນພວກມ້າເອງ ກິນອີ່ມທ້ອງໃຫຍ່, ແຜງຂົນຄໍເປຍຮຽບຮ້ອຍແລະຫາງຂອດເປັນຄືເກົ້າຜົມ.

ຄືນມື້ຫນຶ່ງໃນລະຫວ່າງເດືອນມີທຸນາ ມີເດັກນ້ອຍຫລາຍຄົນແລ່ນມາຈາກຫໍພັກມາຫາຂ້າພະເຈົ້າ.

- ໂກເຊຍບໍ່ສະບາຍແຮງ, ລາວຊິຕາຍແລ້ວ..!

- ນຶ່ງວ່າຫຍັງ? ໃກ້ຊິຕາຍຊັ້ນຫວະ?

- ເອີ...ໃກ້ຊິຕາຍຫັ້ນລະ ໂຕຮ້ອນເປັນໄຟຫາຍໃຈບໍ່ອອກແລ້ວ.

ເອີກາເຕີຣີນາ ກຣີກໍເຣັບນາ ຢືນຢັນວ່າ ໂກເຊຍເຈັບປ່ວຍດ້ວຍພະຍາດຫົວໃຈ, ຈຳເປັນຕ້ອງເອີ້ນແພດມາຢ່າງຮີບດ່ວນ. ຂ້າພະເຈົ້າສົ່ງຄົນໄປເອີ້ນ ອານໂຕນ...ມັນມາຢູ່ໃນທ່າກຽມພ້ອມທີ່ຈະຕ້ານຄຳສັ່ງທຸກຢ່າງທີ່ຂ້າພະເຈົ້າຈະສັ່ງອອກໄປແລ້ວ.

- ອານໂຕນ, ເອົາມ້າໃສ່ກອງນໄວ, ຕ້ອງໄປໃນເມືອງໃຫ້ໄວທີ່ສຸດ...

ມັນບໍ່ປ່ອຍໃຫ້ຂ້າພະເຈົ້າເວົ້າສຸດຄຳ.

- ຂ້ອຍຊິບໍ່ອອກໄປໃສຫມົດ, ບໍ່ຍອມໃຫ້ໃຜເອົາມ້າໃສ່ກອງນ-ແລ່ນໄປໃສອີກແລ້ວ! ເອົາມັນໄປໃຊ້ຫມົດມື້ແລ້ວ...ເຊີນໄປເບິ່ງເທາະແມ້...ເຫື່ອມັນຍັງບໍ່ແຫ້ງຊ້ຳນ່າ...ບໍ່...ບໍ່ຂ້ອຍບໍ່ເຮັດນຳດອກ!

- ນຶ່ງເຂົ້າໃຈບໍ່ວ່າ ເຮົາຊິໄປນຳແພດມາ?

- ຂ້ອຍບໍ່ສົນດອກວ່າໃຜຊິເຈັບໃຜຊິຕາຍ, ບັກແດ່ງກະເຈັບຄືກັນ. ແຕ່ບໍ່ເຫັນມີໃຜນຳແພດມາເບິ່ງມັນຈັກຄົນ!

ຂ້າພະເຈົ້າໂມໂຫຂຶ້ນ:

-ໃຫ້ ໂອປຣິສໂກ ຮັບຜິດຊອບຄອກມ້າແທນດຽວນີ້! ເວົ້າກັບມຶ່ງບໍ່ໄດ້ແລ້ວ!...

-ເອີ ຂ້ອຍຊິມອບໃຫ້ມັນດອກ, ຄັກລະບໍ້ບັດນີ້! ແລ້ວຫາກຊິເຫັນດອກວ່າ ພວກເຈົ້າຊິໃຊ້ກອງນແບບໃດ...ກັບບັກ ໂອປຣິສໂກຫັ້ນນ໊ະ: ມັນເຈັບ, ມັນຊິຕາຍ...ແຕ່ບໍ່ສົນໃຈໄຍດີນຳມ້າພໍຫນ້ອຍ, ມ້າມັນກະຕາຍເປັນຄືກັນເດ້...ເອົາລະປ່ອຍໃຫ້ມັນຕາຍສາ! ແຕ່ຂ້ອຍຊິບໍ່ຍອມ. ໃຫ້ໃຜໄປເອົາມັນມາທຽມກອງນອີກແລ້ວ.

-ມຶ່ງໄດ້ຍິນກູບອກແລ້ວຫວະ? ນັບແຕ່ມື້ນີ້ເປັນຕົ້ນໄປ ມຶ່ງພົ້ນຈາກຫນ້າທີ່ລ້ຽງມ້າແລ້ວ, ໃຫ້ໂອປຣິສໂກ ຮັບຫນ້າທີ່ແທນດຽວນີ້!

-ເອີ້ ບ່າ ຂ້ອຍຊິມອບໃຫ້ມັນດອກ. ໃຜຢາກເປັນກໍເຊີນໂລດແລ້ວ, ຂ້ອຍບໍ່ຢາກຢູ່ນີຄົມນີ້ຕໍ່ໄປອີກແລ້ວ!

-ຕາມໃຈມຶ່ງ, ບໍ່ມີໃຜຈ່ອງມຶ່ງໄວ້ບ່າ!

ດ້ວຍນ້ຳຕາຫລໍ່ເບົ້າ, ອານໂຕນ ເອົາມືຈົກລົ້ງໄປຮອດກົ້ນຖົ້ງ ແລ້ວດຶ່ງເອົາລູກກຸນແຈພວງຫນຶ່ງອອກມາວາງໄວ້ເທິງໂຕະ. ໂອປຣິສໂກ ຜູ້ເປັນມືຂວາຂອງ ບຣາເຊັນໂກ ກ້າວເຂົ້າມາໃນຫ້ອງແນມເບິ່ງຫນ້າອາບນ້ຳຕາຂອງຫົວຫນ້າມັນດ້ວຍຄວາມຕົກໃຈ. ບຣາເຊັນໂກ ເສືອດແສງຕາຫມຶ່ນປະຫມາດຟາດໃສ່ມັນບາດຫນຶ່ງ ຄືຢາກເວົ້າອັນໃດອັນຫນຶ່ງ ແຕ່ບໍ່ເວົ້າເອົາມືກູດ້ງແລ້ວອອກໄປ.

ໃນເວລາມົ້ດຄ່ຳນັ້ນເອງ ມັນກໍອອກຈາກນີຄົມໂດຍບໍ່ແຈ່ເຂົ້າໄປຮອດຫໍພັກຊ້ຳ. ພວກໄປນຳແພດສອນທາງກັບມັນໃນຂະນະທີ່

ມັນພວມຍ່າງຢູ່ເທິງແຄມທາງ. ມັນຮອດບ່ຍົກມືຂຶ້ນຮ້ອງຂໍໃຫ້ເຂົາ ເອົາມັນຂຶ້ນກວມນ້ານຳທັງເຮັດທ່າທາງປະຕິເສດການເຊື້ອເຊີນຂອງ ພວກເຂົາ.

ຫລັງຈາກນັ້ ໃນຕອນຄ່ຳມື້ທີສອງ, ໂອປຣິສໂກ ໂປໂລເຂົ້າມາ ໃນຫ້ອງຂ້າພະເຈົ້າ ໃບຫນ້າເຕັມໄປດ້ວຍເລືອດ; ຂ້າພະເຈົ້າບໍ່ທັນ ໄດ້ຖາມມັນຊ້ຳວ່າ ເກີດຫຍັງຂຶ້ນ, ນາງລິດາ ເປຕຣອບມາ ເຊິ່ງ ເປັນນາຍເວນປະຈຳວັນ ກໍແລ່ນຕາຕີ່ຕາລານເຂົ້າມາໃນຫ້ອງຂ້າພະ ເຈົ້າ ນາງຮ້ອງຂຶ້ນວ່າ:

-ອານໂຕນ ເຊມີອໂນວິດ ...ໄປຄອກມ້າດ່ວນນີ້! ບຣາເຊັນ ໂກອາລະວາດຢ່າງໃຫຍ່... ຂ້ອຍບໍ່ຈັກຈະເຮັດແນວໃດ..!

ຮອດກາງທາງພວກເຮົາພົ້ບກັບບັກຕຸ້ຍ ເຟໂດເຮັງໂກ ຜູ້ຊ່ວຍ ໂອປຣິສໂກ ຢູ່ຄອກມ້າ, ມັນຮ້ອງສຽງກ້ອງປານສຽງສະທ້ອນໃນປ່າ, ຂ້າພະເຈົ້າຖາມມັນວ່າ:

-ມຶງເປັນຫຍັງ?

-ຂ້ອຍ... ມັນ... ມັນມີສິດຫຍັງ?... ມັນເອົາສ້ອມສຽບເຟືອງ ຟາດມາໃສ່ຫນ້າຂ້ອຍ!

-ແມ່ນໃຜ? ບຣາເຊັນໂກ ຫວະ?

-ບຣາເຊັນໂກ! ໂອ ແມ່ນລະບໍ!

ຢູ່ຄອກມ້າ, ຂ້າພະເຈົ້າພົບ ບຣາເຊັນໂກ ກຳລັງສາລະວິນເຮັດ ວຽກ ຢູ່ກັບຄົນລ້ຽງມ້າອີກຜູ້ຫນຶ່ງ. ມັນຖາມສະບາຍດີກັບຂ້າພະເຈົ້າ ແບບເສີຍໆ ແຕ່ພໍມາບເຫັນ ໂອປຣິສໂກ ຢູ່ເບື້ອງຫລັງຂ້າພະເຈົ້າ

ມັນກໍລືມໄປວ່າຂ້າພະເຈົ້າຢູ່ທີ່ນີ້ນຳ, ມັນໂດດເຂົ້າໃສ່ ໂອປຣິສໂກ ທັນທີ.

-ທ່ານທີ່ດີ ທ່ານບໍ່ຕ້ອງຍົນເຂົ້າມາໃນນີ້ອີກ, ບໍ່ຊັ້ນກູຊິເອົາດ້ານ ຄາດນີ້ຟາດຫົວທ່ານຫຸ່ນໂລດ. ຮື...ຈັ່ງແມ່ນທ່ານເກັ່ງຕ່ວາ. ນັກຂັບ ກວນໃຫຍ່ລະບໍ, ເບິ່ງດູວ່າບັກແດງເປັນແນວໃດແລ້ວຫນີ!

ອານໂຕນ ໃຊ້ມືເບື້ອງຫນຶ່ງປົດຕະກວງລົງມາ ສ່ວນອີກມືຫນຶ່ງ ແກ່ແຂນຂ້າພະເຈົ້າເຂົ້າໄປເບິ່ງມ້າ. ແມ່ນແທ້ວ່າຄໍຫນຳ ບັກແດງ ເປັນຮອຍບາດເລິກເປັນຕາຢ້ານ ແຕ່ພວກເຂົາໄດ້ເອົາຜ້າບາງໆຕັ້ງ ຮອຍບາດໄວ້ແລ້ວ, ອານໂຕນ ດຶງແພອອກຢ່າງນຸ້ມນວນ ຈາກນັ້ນ ຈຶ່ງວາງລົງຄືນ.

-ຂ້ອຍເອົາຟຸ່ນຂ້າເຊື້ອໂຣຍໃຫ້ມັນແລ້ວ! ມັນບອກດ້ວຍທ່າທີ ເຄັ່ງຂຶມ.

-ວ່າແຕ່ວ່າ ນົງໃຊ້ສິດອັນໃດຂອງນົງເຂົ້າມາໃນຄອກມ້າຫນ້ໍລະ? ເຂົ້າມາອາລະວາດຕີຂ້າຄົນແນວນ້ໍ? ?

-ເຈົ້າຄຶດວ່າເຮັດທ່ໍ້ພຽງພໍສຳລັບມັນແລ້ວຫວະ? ທ່ານທີ່ດີ ທ່ານໃຫ້ມັນຫນີຈາກສາຍຕາຂ້ອຍໄວ້ນັ້ນເທາະ ບໍ່ຊັ້ນຂ້ອຍຍັ້ງຊິສັ່ງ ສອນມັນອີກ!

ມີສຽງຫົວດັງມາຈາກກຸ່ມເດັກນ້ອຍ ທ່ີ່ຕິດຕາມມາເບິ່ງເຫດການ ຢູ່ປະຕູຄອກມ້າ. ຂ້າພະເຈົ້າເອງບໍ່ມີແຮງພໍທ່ີ່ຈະໄປຄວດໃຫ້ ອານ ໂຕນ: ມັນເຊື່ອຫມັ້ນຕົນເອງໂພດວ່າ ມັນກັບມ້າຂອງມັນເປັນຝ່າຍ ຖືກທ່ີ່ສຸດແລ້ວ!

-ເອົາລະ ອານໂຕນ. ໂທດກ່ານຕີຫມູ... ນຶ່ງໄປຢູ່ຫ້ອງກູຕະ ຫລອດຄືນເດ້.

-ເຈົ້າວ່າຂ້ອຍມີເວລາຊັ້ນຫວະ?

-ບໍ່ຕ້ອງມາກຸງ! ຂ້າພະເຈົ້າຮ້ອງໃສ່ມັນ.

-ເອົາລະ ເອົາລະ, ໄປນອນຕາຍຢູ່ຫັ້ນລ້າໆບໍ່ເຮັດຫຍັງ...

ຄືນນັ້ນມັນໄປຢູ່ໃນຫ້ອງຂອງຂ້າພະເຈົ້າ, ອ່ານປຶ້ມຫົວຫນຶ່ງ ທັງໂມໂຫ.

ລະດູຫນາວ ປີ ໑໙໔໔ ນຳຄວາມທຸກທໍລະມານມາໃຫ້ພວກ ເຮົາຫລາຍນັ້ຫລາຍເວັນ. ເຂົ້າໂອ໊ດທີ່ ກາລິນາ ອີວາໂນວິດ ຫວ່ານ ໃສ່ເດີ່ນດິນຊາຍແຫ້ງແລະຂາດຝຸ່ນນັ້ນ ປີ່ງດອກອອກຫມາກໃຫ້ຜົນ ແຕ່ຫນ້ອຍດຽວ. ແມ່ນແຕ່ເພື່ອງກໍເກືອບວ່າບໍ່ມີເລີຍ. ເວລານັ້ນ ພວກເຮົາຍັງບໍ່ມີທົ່ງຫຍ້າ ຊໍ້. ຕົກຮອດເດືອນມັງກອນ ພວກເຮົາ ກໍຂາດເຂືນຫຍ້າແຫ້ງສຳລັບສັດ, ທຳອິດພວກເຮົາດຶ່ນຣົນ ຕໍ່ສູ້ເຮັດ ໄປທົ່ວທຶບ ຂາດອັນໃດກໍໄປຂໍທານເອົາຢູ່ໃນເມືອງ ຫລື ນຳຄົນ ບ້ານໃກ້ເຮືອນຄຽງ ແຕ່ບໍ່ດົນເພິ່ນກໍຢຸດໃຫ້ພວກເຮົາ. ທັງ ກາລິນາ ອີວາໂນວິດ ທັງ ຂ້າພະເຈົ້າ ເອງ ສຸດແຕ່ພວກເຮົາໄປເຄາະປະຕູ ຫ້ອງການ, ເຮືອນຊານໃຫບ້ານໃກ້ຄຽງແຕ່ ນັ້ນມັນບໍ່ເປັນຜົນຫຍັງ ເລີຍ.

ໃນທີ່ສຸດຄວາມຫາຍະນະກໍມາງອຍຢູ່ປ່ອງຍ້ຽມ. ບຣາເຊັນໂກ ມາບອກຂ້າພະເຈົ້າດ້ວຍນ້ຳຕາອາບຫນ້າວ່າ ມ້າບໍ່ໄດ້ກິນຫຍັງມາໄດ້ ສອງມື້ແລ້ວ. ຂ້າພະເຈົ້າປາກບໍ່ອອກ. ອານໂຕນເຊັດລ້າງຄອກມ້າ ທັງດ່າທັງໄຫ້ໄປພ້ອມ, ວຸງກຂອງມັນມີແຕ່ອັນດຽວທໍ່ນັ້ນ, ມ້ານອນ

ເຫັນຢູ່ກັບພື້ນແຜ້ນ ແລະ ອານໂຕນ ກໍເນັ້ນຍ້ຳໃຫ້ຂ້ານ້ອຍເຈົ້າສົນໃຈໃນສະພາບການນີ້ເປັນພິເສດ.

ນ້ຳຕໍ່ນາ ກາລີນາ ອີວາໂນວິດ ກັບມາແຕ່ໃນເມືອງດ້ວຍຄວາມໂມໂຫ ອາລົມບໍ່ດີກວ່າທຸກຄັ້ງ.

-ແລ້ວຊິເຮັດແນວໃດກັນລະ? ເພິ່ນບໍ່ໃຫ້ຫຍັງເລີຍ...ຊິເຮັດແນວໃດ?

ອານໂຕນຢືນຢູ່ໃກ້ໆປະຕູ ບໍ່ປາກບໍ່ເວົ້າ ຫຍັງພໍຄວາມ.

ກາລີນາ ອີວາໂນວິດ ວາແຂນອອກ, ຫລຽວເບິ່ງພວກເດັກນ້ອຍແລ້ວເວົ້າວ່າ:

-ໄປຫາລັກສາເບາະສູ? ແລ້ວນ້ຳຊິເຮັດແນວໃດລະ? ອັນພວກສັດຫັ້ນມັນປາກບໍ່ເປັນເດີ້ສູ!

ອານໂຕນ ໄຂປະຕູອອກແຮງໆແລ້ວໂດດອອກໄປນາດນຽວ, ຈົ່ວໂມງຫນຶ່ງຕໍ່ນາ ຂ້າພະເຈົ້າໄດ້ຮັບລາຍງານວ່າ ມັນອອກໄປແລ້ວ.

-ໄປໃສແລ້ວ?

-ບໍ່ມີໃຜຮູ້ນຳມັນແຫລ້ວ ຂອງມັນບໍ່ເວົ້າສູ່ໃຜຟັງ.

ນ້ຳຕໍ່ນາ ມັນຫວນກັບມານິຄົມອີກ ຕິດຕາມດ້ວຍຊາວບ້ານຄົນຫນຶ່ງຂັບກອງນັບຈຸເພື່ອງແທ້ງມາເຕັມ. ຊາຍເຈົ້າຂອງກອງນຸ່ງເຄື່ອງໃຫມ່ອ່ຽມ, ສຸບຫມອກຂົມອ່າວງາມ. ກອງນັ່ນສົ່ງສຽງດັງແອ໊ດໆ ໂຄ້ງເຄື່ອນເຂົ້າໃນເດີ່ນ, ມ້າທີ່ທຽມມານັ້ນເບິ່ງເຫມາະສົມກັບມັນດີ, ຂົນເຫລື້ອມເປັນມັນຍິບຍັບ. ຊາຍຂັບກອງນຈ໊ ກາລີນາ ອີວາໂນວິດ ໄດ້ວ່ານາງເປັນພະນັກງານຄົນຫນຶ່ງ ຈ່ຶງເວົ້າຂຶ້ນວ່າ:

- ບັກນ້ອຍໆຫນໍ່ງ ຢູ່ແຄມທາງພຸ້ນບອກຂ້ອຍວ່າ ຢູ່ຫນ້ໍພວກ
ເຈ້ົາຮັບພາສີກະສິກໍາ.

- ບັກນ້ອຍໃດ?

- ເນ້...ບັກນັ້ນຫັ້ນນ່າ...ມັນມາພ້ອມກັບຂ້ອຍນ້ໍ້ລະ.

ອານໂຕນປ່ອນຫົວອອກມາຈາກຄອກມ້າ ທັ້ງເຮັດສັນຍານແບບ
ໃດແບບຫນໍ່ງໃສ່ຂ້ໍາພະເຈ້ົ້າ.

ກາລິນາ ອິວາໂນວິດ ອິນກອກຄາປາກ ທັ້ງຫົວແບບຕ່ໍາງໆບິນ
ສ້ໍາໄສ, ລາວແກ່ເອ້ົາຂ້ໍາພະເຈ້ົ້າໄປແຈຫນໍ່ງ:

- ເຈ້ົາຊ້ໍເຮັດແນວໃດໄດ້ບັດນ້ໍ້? ຮັບເອ້ົາເທາະແມ້, ບາດແລ້ວ
ຈ່ໍ້ງວ່ໍາກັນ.

ຂ້ໍາພະເຈ້ົ້າຈ່ໍ້ງເລ້ີມເຂ້ົ້າໃຈເລ່ໍ້ອງ.

- ມ້ໍເທ່ໍ້າໃດ?

- ຄ້ໍຊ້ໍເກ້ໍອບ ๘๐ ປູດພຸ້ນລະ, ຂ້ອຍບ່ໍ້ໄດ້ຊ່ໍ້ງນ່ໍ.

ອານໂຕນ ກ້ໍາວອອກມາສ້ໍມທ້ົບເວທ້ົ້ການສະແດງ.

- ຫວ່ໍ້ງຂ່ໍ້ກວນມານ້ໍາກັນ ເຈ້ົ້າເວ້ົ້າກັບຂ້ອຍວ່ໍາມ້ໍ ๓๗ ປູດ
ເທ່ໍ້ານ້ັ້ນ, ບັດນ້ໍ້ເປັນ ๘๐ ຊ້ັ້ນຫວະ? ๓๗ ຫ້ັ້ນລະ.

- ຂ້ົນລ້ໍ້ງແລ້ວເຂ້ົ້າມາເອ້ົ້າໃບຮັບຢູ່ຫ້ອງການ.

ເມ່ໍ້ອເຂ້ົ້າມາໃນຫ້ອງການຂອງພວກເຮ້ົ້າ, ຂ້ໍາພະເຈ້ົ້າຫມາຍ
ຄວາມວ່ໍາຫ້ອງນ້ອຍໆຫ້ອງຫນໍ່ງ ຊ່ໍ້ງຂ້ໍາພະເຈ້ົ້າແອ້ມຕ່ໍ້ອອກມາຈາກ
ຕ້ົກໃຫຍ່ໃນສະໄຫມນ້ັ້ນ ແລ້ວຂ້ໍາພະເຈ້ົ້າໃຊ້ມ້ໍເຊ່ໍ້ອງຊ້ອນຄວາມຜ້ົດ
ຂອງຕົນເອງຂນໃບຮັບໃສ່ເຈ້ຍທ້ົ່ມ້ໍຫມາຍບອກຊ້ໍ້ນ້ໍ້ຄ້ົມດ້ວຍຂ້ໍ້ຄວາມ
ເຫ່ໍ້ານ້ໍ້: ໃບຮັບຂອງປະຊາຊ້ົນຊ່ໍ້ ວາດ ໂອນຸຟຣ ທ້ົ່ໄດ້ເອ້ົາພະລ້ົດ

ພັນກະສິກຳມາເລຍພາສີກະສິກຳ ຄືເຜົ້າແທ້ ໆ ປູດ. ລາຍ ເຊັນແລະປະທັບກາ.

ວາດ ໂອນຸຟຣີ ກົ້ມຫົວຄຳນັບເກືອບຈຸພື້ນ ແລະຈົ່ມຂອບໃຈ ພວກເຮົາດ້ວຍເຫດຜົນອັນໃດອັນຫນຶ່ງບໍ່ຈະແຈ້ງ ແລ້ວກໍອຳລາຈາກ ໄປ.

ບຣາເຊັນໂກ ດີໃຈຫລາຍ, ເບິ່ງມັນເຮັດວຽກພ້ອມກັບສະມາ ຊິກຄອກມ້າທັງຫມົດຢ່າງວ່ອງໄວທັງຮ້ອງເພງອຸ່ນໆນຳ. ກາລິນາ ອີວາໂນວິດ ຫົວຮຶ ໆ ກຸມືໄປມາທ່າທາງຊິງຮັບຜິດບໍ່ຫນ້ອຍ.

ວັນໂຊກວັນໄຊເວ້ຍສຸ ມື້ນີ້, ມີຫວັງເດືອດຮ້ອນຄັກໆຕ່ວາຍ້ອນ ເລື່ອງນີ້ ແຕ່ຊິເຮັດແນວໃດລະ..., ປ່ອຍໃຫ້ສັດຫມູ່ນີ້ອິດຕາຍກະຊິ ເປັນຫວະ, ມັນກະເປັນສິນບັດຂອງລັດຄືກັນນ່າ...

- ແຕ່ວ່າເປັນຫຍັງເກົ້ານັ້ນມາຄືຊິງດີອົກດີໃຈແທ້ລະຮຶ? - ຂ້າ ພະເຈົ້າຖາມ ກາລິນາ ອີວາໂນວິດ.

- ແລ້ວເປັນຫຍັງຊິບໍ່ໃຫ້ມັນດີໃຈລະ? ຄັນພວກເຮົາບໍ່ຮັບເອົາ ມັນກະຕ້ອງເດີນທາງໄປຮອດໃນເມືອງຂົ້ນພູລົງຮ່ອມ ຕັ້ງບໍ່ຈັກທ່ຳໃດ ເທື່ອ ແລ້ວຢູ່ພຸ້ນມັນຍັງຕ້ອງເຂົ້າແກວກ້າຜຸງນອີກ, ສ່ວນວ່າຢູ່ ຫນ້ສຸດແສນມັນສຳບາຍລະບໍ...ທ້າວຜາກນັ້ນມັນວ່າ ໆ ປູດກະ ໆ ບໍ່ມີໃຜກວດກາ ຊັ່ງເບິ່ງຄືນ. ບາງທີອາດຊິມີແຕ່ ໑໕ ກະເປັນໄດ້.

ມື້ຕ່ໍມາ ກໍມີກອງນແກ່ເພື່ອງເຂົ້າມາໃນນິຄົມພວກເຮົາຕື່ມ.

- ມາເລຍພາສີກະສິກຳນ່າ, ເກົ້ວາດມັນບອກວ່າ ເອົາມາເລຍ ກັບພວກເຈົ້າກໍໄດ້...

- ເອ້ີ...ຊິວ່າແນວໃດລະ?

- ຂ້ອຍກໍມີນາມສະກຸນວ່າວາດຄືກັນ, ສະເຕປານ ວາດ.

- ກ້າບຶດຫນໍ່ງເດ້.

ຂ້າພະເຈົ້າຫລີບອອກໄປຊອກຫາ ກາລີນາ ອີວາໂນວິດ ເພື່ອ ປຶກສາຫາລືກັບລາວ. ຢູ່ລະບ່ງເຮືອນຂ້າພະເຈົ້າພໍ້ກັບອານໂຕນ:

- ເທົ່ອຫນໍ່ງ ມ໊ງເຄີຍບອກຫົນທາງໃຫ້ຄົນມານີ້...ແລ້ວບາດ ນັ້...

- ອານໂຕນ ເຊມີອໂນວິດ, ຮັບເອົາເຄື່ອງສາ, ບໍ່ເປັນຫຍ້ງ ດອກ ບາດແລ້ວຫາກຈະມີທາງແກ້.

ຮັບເອົາເຄື່ອງເປັນເລື່ອງບໍ່ສົມຄວນຢ່າງຍິ່ງ ແຕ່ປະຕິເສດມັນກໍ ເປັນເລື່ອງບໍ່ຄວນເຮັດເທົ່າໆກັນເພາະວ່າຈະເຮັດໃຫ້ເກີດຄໍາຖາມວ່າ ເປັນຫຍ້ງຮັບເອົາທ້າວວາດນີ້ແລ້ວ ຊ້ໍາຜັດບໍ່ເອົານໍາຜູ້ນັ້ນ.

- ໄປຂົນເຟ້ອງອອກຊ່ວມຊ່າຂ້ອຍຂນໃບຮັບໃຫ້...

ແລ້ວພວກເຮົາກໍຮັບເອົາເຟ້ອງອີກຕັ້ງ ๔ ກວນໃຫຍ່ ແລະ ເຂົ້າໂອ໊ດຕັ້ງອີກ ๔๐ ປູດ.

ຂ້າພະເຈົ້າລໍຄອຍໂທດກໍາຈາກການກະທໍາອັນນີ້ພໍປານນັກໂທດ ຄອຍວັນປະຫານ. ອານໂຕນ ສ້ົງຊອມເບ່ົງຂ້າພະເຈົ້າຢ່າງເອົາໃຈ ໃສ່ ພ້ອມທ້ັງມີຮອຍຍ້ົມແບບລ້ັບເທ້ົງໃບຫນ້າ. ແຕ່ໃນທາງກ້ົງກັນ ຂ້ານບັດນ້ັນບໍ່ຄັດຄ້ານຕໍ່ຕ້ານກັບຜູ້ມາຂໍນ້ໍາໄປໃຊ້ວງກ ອີກແລ້ວ, ນ້ັນເຕັມໃຈປະຕິບັດຄໍາສ່ັງກ່ວກັບວງກຂົນສ່ົງ ແລະເຮັດວງກດຸຫນ້ັນ ຂະຫຍັນແຂງບໍ່ຕ່າງຫຍ້ງກັບເທບພະເຈົ້າ ແຮກູລັສ.

ໃນທ້ີ່ສຸດ ຂ້າພະເຈົ້າກໍໄດ້ຮັບຈົດຫມາຍກາມສ້ັນໆ ແຕ່ແຈ່ມ ແຈ້ງເປັນພິເສດດ້ັ່ງນ້ີ:

- ຕອບດ່ວນວ່ານິຄົມກ້ອກກີຣັບເອົາພາສີກະສິກຳໃນນາມໃຜ.

ລົງນາມຜູ້ກວດກາມສະບາງເຂດ ອາເກເນັບ.

ຂ້າພະເຈົ້າບໍ່ເວົ້າເລື່ອງນີ້ໃຫ້ ກາລິນາ ອີວາໂນວິດ ຮູ້ນຳພໍ ຄວາມ ແລະອີດໃຈບໍ່ຕອບໄປ. ຂ້າພະເຈົ້າຈະຕອບໄປໄດ້ແນວໃດ?

ເກີງເດືອນເມສາ, ກອງນທາງນ້ຳຄູ່ສີດຳປີ້ເຫລັ້ມຫນຶ່ງກໍມາ ປາກົດຕົວຂຶ້ນໃນນິຄົມ ແລະຈາກນັ້ນບໍ່ພໍເທົ່າໃດນາທີ ບຮາເຊັນໂກ ກໍສັ່ນທິດໆເຂົ້າມາໃນຫ້ອງການຂອງຂ້າພະເຈົ້າ.

- ນາລະ...ເພິ່ນມາແລ້ວ. - ມັນເວົ້າທັງຫອບຫັນໃຈໃຫຍ່.

- ແມ່ນໃຜນາ?

- ນາ...ຍ້ອນເລື່ອງເຟືອງຫັ້ນລະ...ເພິ່ນຜູ້ນີ້ໂຫດຫ້ານໃດ໋.

ອານໂຕນ ນັ່ງລົງບັງເຕົາໄຟ ແລະນິ່ງງນຢູ່.

ຜູ້ກວດການສະບາງກໍບໍ່ຕ່າງຫຍັງກັບຜູ້ກວດກາອື່ນໆດອກ, ລາວ ນຸ່ງເສື້ອນອກຫນັງ, ຂັດປັ້ນສັ້ນເບື້ອງຫນຶ່ງ, ທ່າທາງຫນຸ່ມແຫນ້ນ ເຫມາະສົມກັບເຄື່ອງນຸ່ງ.

- ເຈົ້າເປາະເປັນຜູ້ອຳນວຍການ?

- ເຈົ້າແມ່ນແລ້ວ.

- ໄດ້ຮັບຫນັງສືຂໍຄວາມກະຈ່າງແຈ້ງຈາກຂ້ອຍບໍ່?

- ໄດ້ຮັບແລ້ວ.

- ແລ້ວເປັນຫຍັງຈຶ່ງບໍ່ຕອບ? ເຮັດແນວນີ້ຫມາຍຄວາມວ່າຈັ່ງ ໃດ, ຕ້ອງໃຫ້ຂ້ອຍມາເອງຈັ່ງຊີ້ຫວະ? ແມ່ນໃຜອະນຸຍາດໃຫ້ເຈົ້າ ເກັບພາສີກະສິກຳຢູ່ຫນ້ີ?

- ພວກເຮົາຮັບເອົາຢ່າງບໍ່ມີໃຜອະນຸຍາດ.

ຜູ້ກວດການໂຍ້ລຸກຈາກຕັ່ງອີ້, ຮ້ອງຂຶ້ນແຮງໆວ່າ:

-ບໍ່ມີອະນຸຍາດວ່າຕໍ? ເຈົ້າຮູ້ບໍ່ວ່າມັນຊິເປັນແນວໃດບັດນີ້? ຂ້ອຍມືສຶດຈັບເຈົ້າດ່ວນນີ້...ຮູ້ໂຕບໍ່?

ຂ້າພະເຈົ້າຮູ້ແລ້ວ ຈຶ່ງບອກກັບລາວສຸພາຫນັກໆວ່າ:

-ເຈົ້າຢາກເຮັດຈັ່ງໃດກໍເຮັດ, ຂ້ອຍບໍ່ຂໍແກ້ຕົວ ຫລືຫລົບລີ້ ຫນີຄວາມ...ແຕ່ຂໍນຳຢ່າຮ້ອງແຮງແນວນີ້. ເຊີນເຈົ້າປະຕິບັດຕາມເຫັນສົມຄວນໂລດ!

ລາວແລ່ນວົນໄປມາຕາມທາງຂວາງຂອງຫ້ອງການອັນຄັບແຄບຂອງຂ້າພະເຈົ້າ:

-ຜີໂຕໃດນໍ້ຊຸກເລື່ອງແນວນີ້ມາໃສ່ຫົວກູ! ລາວຈົ່ມຜູ້ດ່ວນ ທັງ ຫາຍໃຈດັງຟຶດຟັດພໍປານນ້ຳ.

ອານໂຕນ ອອກມາຈາກຫລັງເຕົາໄຟມາຢືນແນມນຳ ສີລ້ຽ ທ່າທາງຜູ້ກວດການຢ່າງເຫງົາຫງອຍ. ໃນທັນໃດນັ້ນ ມັນເວົ້າອຸ່ມໆ ຂຶ້ນພໍປານສຸພາແມ່ງກີນູນບິນອື່ງມາວ່າ:

-ພາສີກະສີກຳຫລືວ່າພາສີແນວອື່ນ ກະບໍ່ມີໃຜຊິບໍ່ເຮັດຄືພວກເຮົາດອກ ຖ້າຫາກວ່າ ນ້ຳຂອງພວກເຂົາບໍ່ມີຫຍັງແຫບຮອດ ๔ ນິ້ ຄືແນວນີ້! ຖ້າຫາກວ່ານ້ຳບັກນິນຄູ່ງາມຂອງທ່ານບໍ່ເຮັດຫຍັງແລ້ວ ມີແຕ່ນອນແອ່ງແຫລ່ງຫາຍທ້ອງຢູ່ຕັ້ງສິ້ນແລ້ວ ຂໍຖາມແດ່ວ່າທ່ານ ຈະບໍ່ແລ່ນຕາເຫລືອກມາຫາພວກເຮົາຢູ່ບໍ?

ອາເກເນັບ ຢຸດຍ່າງ, ງວາກມາເບິ່ງຢ່າງແປກໃຈ.

-ແລ້ວນ້ຳແມ່ນໃຜລະ? ມາເຮັດຫຍັງຢູ່ຫນີ?

-ມັນເຫັນຫົວຫນ້າຄອກນ້ຳ, ເວົ້າແທ້ແລ້ວ ເລື່ອງນີ້ກ່ວ່ອກັບ ມັນຢູ່ຫລາຍເຕີບ.

ຜູ້ກວດການສະບຽງເລີ່ມເຕັ້ນຫອບໄປມາພາຍໃນຫ້ອງອີກແລ້ວ ມາຢຸດກຶກຢູ່ຕໍ່ຫນ້າອານໂຕນ.

- ແລ້ວນຶ່ງຈິດບັນຊີບັນໄວ້ບໍ່ລະ ຫຍ້າແຫ້ງທີ່ຮັບໄວ້ຫັ້ນນະ? ບັກ...

ອານໂຕນ ໂດດມາໃສ່ໂຕະຂ້າພະເຈົ້າ ແລະຈົ່ມພຸມໆຢ່າງກ້າວິນ ໃຈວ່າ:

- ອານໂຕນ ເຊນີໂນວິດ ພວກເຮົາຈິດໄວ້ຫນິດແມ່ນບໍ?

ຂ້າພະເຈົ້າຫົວຂຶ້ນແຮງໆ ແລະ ອາເກເນັບກໍຫົວຄືກັນ.

- ຈິດໄວ້ແທ້.

- ເຈົ້າໄປໄດ້ຄົນຄັກແນວນີ້ມາແຕ່ທາງໃດ? ຜູ້ກວດການສະບຽງ ຖາມຂຶ້ນ.

- ພວກເຮົາສ້າງໃຫ້ມັນເປັນແນວນີ້ເອງ! - ຂ້າພະເຈົ້າຕອບທັງ ຍັ້ມ.

ບຣາເຊັນໂກ ເສືອດຕາໄປເບິ່ງຫນ້າຜູ້ກວດການສະບຽງ ແລ້ວ ຖາມຂຶ້ນດ້ວຍນ້ຳສຽງອົບອຸ່ນແຝງມິດໄມຕີວ່າ:

- ຕ້ອງເອົາຫຍ້າໃຫ້ມ້າບັກນຶ່ນຂອງເຈົ້າບໍ?

- ເອີ...ເອົາໃຫ້ກໍດີ!

ບົດທີ ໑໓

ອິດຊາຈິ

ຕະຫລອດລະດູຫນາວຕໍ່ລະດູບານໃຫມ່ປີນັ້ນ ຢູ່ໃນນິຄົມກ້ອກກີ ເກີດມີເລື່ອງຫນ້າຫວາດສຽວຫັ້ງນັ້ນ. ເຫດການທັ້ງຫມົດນີ້ເກີດ

ຕິດຕໍ່ກັນຢ່າງບໍ່ເວັ້ນຫວ່າງ ແລະມາຮອດປັດຈຸບັນເຫດການທັງຫມົດ
ຍັງຝັງແໜ້ນຢູ່ໃນຈິດສຳນຶກຂອງຂ້າພະເຈົ້າ ຄ້າຍຄືເຄາະກຳກອງ
ຫນຶ່ງທີ່ໂພະໂຮມກັນຢູ່.

ຢ່າງໃດກໍຕາມ ວັນເວລາທີ່ອາບເອືອບໄປດ້ວຍເລື່ອງໂສກນາດ
ກະກຳເຫລົ່ານີ້ກໍຫາກຍັງເປັນບັນຕອນຫນຶ່ງແຫ່ງການເຕີບໃຫຍ່ຂະ
ຫຍາຍຕົວຂອງພວກເຮົາ ບໍ່ວ່າໃນດ້ານເສດຖະກິດກໍຄືໃນດ້ານສຸຂະ
ພາບ. ມາຮອດດຽວນີ້ ຂ້າພະເຈົ້າຍັງບໍ່ສາມາດອະທິບາຍໄດ້ເລີຍວ່າ
ສິ່ງທັງຫມົດເຫລົ່ານີ້ດຳລົງຄົງຕົວຮ່ວມກັນ ຢ່າງສອດຄ່ອງກັບຕັກກະ
ສາດໄດ້ແນວໃດ. ວັນທຳມະດາຫນຶ່ງໆຂອງພວກເຮົາແມ່ນວັນທີ່
ແຈ່ມໃສອົບອຸ່ນຟົດຟື້ນດ້ວຍສຽງຫົວ, ວຽກງານ, ມິດຕະພາບ
ເຊື່ອໃຈຕໍ່ກັນແລະກັນ, ມິດຕະພາບຮູ້ສຶກຮັກແພງຕໍ່ກັນແບບມະນຸດກັບ
ມະນຸດ, ມີສຽງເວົ້າຍອກເຍ້ຍບັນນອງແລະການຊຸມໃຊ້ສະຕິປັນຍາ.
ແຕ່ລະອາທິດມີເຫດການເຫລືອເຊື່ອເກີດຂຶ້ນຢ່າງຫນຶ່ງ, ມັນດຶງເອົາ
ພວກເຮົາຈົມປິ້ງລົງສູ່ຮ່ອງເຫວເລິກລ້ຳ ຜູກມັດພວກເຮົາເຂົ້າໃສ່
ກັບເຫດການຫນ້າຢ້ານຢ່າງບໍ່ຮູ້ສຶກຕົວ ຈົນສູນເສຍຈິດສຳນຶກສາມັນ
ກ່ຽວກັບວັດຖຸສິ່ງຂອງ ຄ້າຍຄືຄົນປ່ວຍທີ່ສຳຜັດ ແລະຮູ້ສຶກເກີ່ງໂລກ
ພາຍນອກດ້ວຍລະບົບປະສາດທີ່ເຄັ່ງຂຶມໃກ້ຈຸດລະເບີດ.

ໂດຍບໍ່ຄາດຝັນມາກ່ອນແນວຄິດຕໍ່ຕ້ານຍິວໄດ້ແຕກຂຶ້ນຢູ່ພາຍໃນ
ນິຄົມຂອງພວກເຮົາ. ຜ່ານມາຍັງບໍ່ເຄີຍມີເດັກນ້ອຍຍິວມາຢູ່ນຳ
ພວກເຮົາຈັກຄົນ. ເດັກນ້ອຍຍິວຜູ້ທຳອິດກໍກັ່ງມາໃຫ້ພວກເຮົາໃນ
ຕອນກາງລະດູໃບໄມ້ຫລົ່ນ, ຕໍ່ມາຈຶ່ງມີມາຕື່ມອີກເທື່ອລະຄົນເທົ່າ
ນັ້ນ. ໃນຈຳນວນນີ້ ມີຫມໍຫນຶ່ງເຄີຍເປັນຕຳຫລວດຍຸຕິທຳແລ້ວ

ແລະເພາະສະນັ້ນພວກນັກຮຽນຮຸ່ນອ້າຍໃນນິຄົມ ຈຶ່ງເລີ່ມສຳແດງ
ຄວາມປ່າເຖື່ອນຮຸນແຮງອອກໃສ່ຫມໍນີ້ເປັນຜູ້ທຳອິດ.

ຢູ່ໃນປະຕິກິລິຍາຕໍ່ຕ້ານຍີວນີ້ ທຳອິດຂ້າພະເຈົ້າເອງຮອດບໍ່ຮູ້ຊ້ຳ
ວ່າແມ່ນໃຜຜິດຫນ້ອຍຜິດຫລາຍກ່ວາກັນ, ພວກເດັກນ້ອຍທີ່ມາ
ຮອດນິຄົມໃຫມ່ໆ ເກີດມີແນວຄິດຕ້ານພວກຍີວ ຍ້ອນວ່າພວກເຂົາ
ພົບພໍ້ເຫຍື່ອໄຮ້ພິດໄພໂຕໃຫມ່ ເພື່ອອວດອ້າງສັນຊາດຍານນັກລ່າ
ອັນຕະພານຂອງພວກເຂົາອອກມາ. ສ່ວນສຳລັບພວກຮຸ່ນອ້າຍນັ້ນ
ມັນເປັນໂອກາດປອດໂປ່ງຫນຶ່ງອະນຸມັດໃຫ້ພວກເຂົາ ໄດ້ຄຸຍໂອ້ໂອ້
ອວດດ່າວ່າພວກເດັກນ້ອຍຍີວຢ່າງເຕັມໃຈ.

ເດັກນ້ອຍຍີວຜູ້ທຳອິດຊື່ວ່າ ອິດສະໂຕຣມູກິບ. ມັນຖືກຮາວີ
ທຸກໆໂອກາດ ເຖິງແມ່ນວ່າຈະບໍ່ມີເຫດມີຜົນຈຳເປັນອັນໃດທີ່ຈະ
ຕ້ອງລົງມືກໍຕາມ. ເຂົາຕີຫົວມັນ ລໍ້ຫລອກມັນຕະຫລອດເວລາ ລັກ
ເອົາສາຍແອວເສັ້ນງາມຂອງມັນ ຫລືເກັບຄູ່ດຽງຂອງມັນໄປເຊື່ອງ
ແລ້ວ ເອົາອັນກິດຽງຂາດໆໃຊ້ການບໍ່ໄດ້ມາໄວ້ແທນບ່ອນເຮັດແນວໃດ
ແນວຫນຶ່ງ ບໍ່ໃຫ້ມັນມີຂອງກິນຄືຫມູ່ຫລືບໍ່ກໍເຮັດໃຫ້ອາຫານສ່ວນ
ຂອງມັນເສຍຫາຍ, ວິນອນທຸກກອນມັນແຕ່ເຊົ້າເທົ່າຄ່ຳ, ດ່າວ່າ
ປ້ອຍແຊ່ງດ້ວຍຄຳຫຍາບຊ້າທຸກແບບທຸກແນວແລະຮ້າຍແຮງກ່ວາ
ຫມູ່ ກໍແມ່ນເຮັດໃຫ້ມັນຢ້ານສັ່ນເຊັນຈົນຕັບລີບ ແລະຄັບແຄ້ນ
ແຫ້ນໃຈ. ນີ້ແມ່ນຊາຕາກຳທີ່ນິຄົມຍັດຢູ່ໃຫ້ແກ່ອິດສະໂຕຣມູກິບ,
ບໍ່ມີແຕ່ມັນນີ້ຄົນດຽວດອກແຕ່ ຊະແນແດກ, ເກລແຊ ແລະກຣາຍ
ນິກກໍຕົກຢູ່ໃນສະພາບອັນດຽວກັນນີ້. ຕໍ່ສູ້ກັບສະພາບເຫລົ່ານີ້ຫວະ!
ມັນແມ່ນເລື່ອງສັບສົນຫຍຸ້ງໃຈສຸດຂີດເລື່ອງຫນຶ່ງ. ທຸກສິ່ງທຸກຢ່າງ

ເກີດຂຶ້ນຢ່າງລຶ້ລັບສົມບູນແບບ, ມີການວາງແຜນໄວ້ຢ່າງຮອບຄອບ ຂະຫນາດວ່າພວກເດັກນ້ອຍຍືວເອງ ບໍ່ກ້າແມ່ນແຕ່ຈະມາພ້ອງຮ້ອງ ຍ້ອນຄວາມຢ້ານຕາຍ. ມັນແມ່ນສະພາບຫນ້າທໍ້ກ່ອຍຫນິດຫວ້ງ, ອາການນິດສະຫງັດບໍ່ມີປາກມີສຽງຂອງພວກເຂົາ, ອາການເມື່ອຍ ຂອງພວກເຂົານັ້ດອກ ທີ່ຊ່ອຍໃຫ້ພວກເຮົາຮູ້ຈັກສະພາບການໄດ້ ໂດຍທາງອ້ອມ ປະກອບກັບສຽງຊຶ່ມຊັບຢູ່ນອກວົງລະຫວ່າງການໂອ້ ລົມສົນທະນາພົບພໍ້ແບບກັນເອງຂອງພວກເດັກນ້ອຍຂີ້ຢ້ານ ກັບຄູ ເຝິກສອນພວກເຂົານັ້ນຊ່ອຍເຂົ້ານຳ.

ເຖິງຢ່າງນັ້ນກໍຕາມ ມັນເປັນເລື່ອງເຫລືອວິໄສຢ່າງຫນ້ຶ່ງຄືກັນ ທີ່ຈະສາມາດປົດອຳສະພາບການຊົ່ວຮ້າຍອັນນີ້ ໄດ້ຈາກສາຍຕາຂອງ ພວກຄູສອນໄດ້ຕະຫລອດໄປ ຈັ່ງຊັ້ນມາຮອດມື້ຫນ້ຶ່ງ ແນວຄິດຕໍ່ ດ້ານພວກເດັກນ້ອຍຍືວ ພາຍໃນນິຄົມຂອງພວກເຮົາ ຈຶ່ງບໍ່ເປັນ ຄວາມລັບສຳລັບໃຜອີກຕໍ່ໄປ. ພວກເຮົາສາມາດຈົດລາຍຊື່ນັກກຸກ ກອນໄດ້ຈຳນວນຫນ້ຶ່ງ. ທັ້ງຫນິດລ້ວນແຕ່ແມ່ນຜູ້ທີ່ພວກເຮົາຮູ້ຈັກ ມາກ່ອນເຊັ່ນ ບູຮຸນ, ມິເຕຍກິນ, ໂອໂລຄອບ, ປຣິໂກດໂກ, ສ່ວນວ່າ ອິດຊາຈິ ກັບ ຕາຣາເນດນັ້ນແມ່ນໂຕການຕົ້ນຕໍ.

ຄວາມສົດຊື່ນແຈ່ມໃສ, ຄວາມລະອຽດອ່ອນ, ແຈວປະເສີດໃນ ດ້ານຈັດຕັ້ງພາຍໃນມັນເອງເຮັດໃຫ້ ຕາຣາເນດ ກ້າວນຳຫນ້າຫມູ່ ມາແຕ່ດົນແລ້ວ, ແຕ່ການມີເດັກນ້ອຍຮຸ່ນແກ່ກ່ອາເຂົ້າມາຕື່ມບໍ່ອຳ ນວຍໃຫ້ມັນເສີມຂະຫຍາຍພຶດຕິກຳຕ່າງໆເຫລົ່ານັ້ນ. ຈັ່ງຊັ້ນພະລັງ ງານອ່າວເຫນືອຫມູ່ຂອງມັນຈຶ່ງປະສົບກັບຄວາມສົມຫວ້ງ ເມື່ອໄດ້ ລະບາຍອອກມາຂົ່ມເຫ້ງພວກເດັກນ້ອຍຍືວ. ອິດຊາຈິ ເປັນບ່າວ

ນ້ອຍໄວ ສິບຫົກ, ຫມໍນີ້ເປັນຄົນຫົວແຂງດ້ານ, ແຂງແຮງ ແລະ ໄຮ້ສິນທຳທີ່ສຸດ. ມັນພາກພູມໃຈໃນອະດີດຂອງມັນ ທັງໆທີ່ວ່າໂຕ ມັນເອງກໍບໍ່ເຫັນວ່າມີຫຍັງຫນ້າເຫລື້ອມໃສເລີຍ ແຕ່ຍ້ອນຄວາມດື້ ດ້ານຈອງຫອງມັນຖືວ່ານັ້ນແມ່ນອະດີດຂອງມັນ ແລະຊີວິດຂອງມັນ ກໍບໍ່ກ່ຽວຂ້ອງກັບຜູ້ໃດ.

ອິດຊາຈິ ຮູ້ຈັກວິທີສ້າງຄວາມຕື່ນເຕັ້ນໃຫ້ແກ່ຊີວິດສະເຫມີ, ຈັ່ງຊັ້ນ ໃນແຕ່ລະມື້ ມັນຈຶ່ງພະຍາຍາມເຮັດແນວໃດແນວຫນຶ່ງໃຫ້ຊີ ວິດມີລົດຊາດຂຶ້ນ. ເລື່ອງນີ້ບໍ່ຍາກສຳລັບມັນຈັກຫນ້ອຍເລີຍ ແລະ ມັນກໍພໍໃຈໄປສະແຫວງຫາຄວາມມ່ວນຊື່ນແບບນີ້ຢູ່ທົ່ວບ້ານປຶຣອບກາ ເຊິ່ງຕັ້ງຢູ່ຂອບເມືອງແລະປະຊາຊົນໃນບ້ານນີ້ ເກືອບເຄິ່ງຫນຶ່ງແມ່ນ ພວກກູລັກ ແລະຊົນຊັ້ນນາຍທຶນນ້ອຍ. ສະໄຫມນັ້ນຢູ່ບ້ານ ປຶຣອບ ກາໃຫ້ວ່າເຕັມໄປດ້ວຍຜູ້ສາວງາມ ແລະເຫລົ້າເກື່ອນ ອຸບາຍມຸກສອງ ຢ່າງນີ້ເປັນຍອດປາດຖະຫນາຂອງອິດຊາຈິ, ສະຫມັກພັກພວກຜູ້ ຫນຶ່ງທີ່ຕິດຂ້າງມັນເປັນປະຈຳກໍແມ່ນ ກາລາແຕ້ງໂກ ຍອດຂີ້ຄ້ານ ແລະນັກກິນຜູ້ມີຊື່ສຽງກ້ອງນິຄົມ.

ອິດຊາຈິ ຈັ່ງຜິນຊີ້ງແປກປະຫລາດຢ່າງຫນຶ່ງ ດ້ວຍຄວາມພາກ ພູມໃຈ ຍອຍຜິນປົກຫ້ອຍລົງບັງຕາມັນສະເຫມີ ແຕ່ຫາກເປັນຊີ້ງ ຜິນທີ່ຢູ່ໃຫ້ມັນມີທ່າດີຢ່າງຫລວງຫລາຍ ຢູ່ໃນການຕໍ່ສູ້ຍາດແຍ່ງ ຄວາມຮັກແພງຈາກຜູ້ສາວໃນບ້ານ ປຶຣອບກາ. ເມື່ອໃດ ຂ້າພະ ເຈົ້າພະຍາຍາມສອດມືເຂົ້າໄປຫຍຸ້ງ ກ່ຽວກັບຊີວິດສ່ວນຕົວຂອງມັນ ແລ້ວ ສາຍຕາທີ່ເຊື່ອງລີ້ຢູ່ເບື້ອງຫລັງປອຍຜິນດົກຫນາ ກໍຈະເລື່ອກ ຟາດມາເບິ່ງຂ້າພະເຈົ້າຢ່າງໂກດແ ຄ້ນຄືກັບວ່າມັນເຫລືອໃຈກຽດຊັງ

ຂ້າພະເຈົ້າ ທີ່ເສືອກຫ້າມບໍ່ໃຫ້ມັນອອກໄປສະແຫວງຫາຄວາມສໍາ
ລານຢູ່ບ້ານ ປີຣອບກາ ທ້າຽກຮ້ອງບ້ງຄັບໃຫ້ມັນສົນໃຈ ເອົາໃຈໃສ່
ໃນວຽກງານຂອງນິຄົມຫລາຍຂຶ້ນກ່ວາເກົ່າ.

ອິດຊາຈິ ຕ້ັງຕົວເປັນຫົວຫນ້ານັກກຸກກອນພວກເດັກນ້ອຍ
ຍິວ. ຂ້າພະເຈົ້າບໍ່ເຊື່ອດອກວ່າ ມັນມີແນວຄິດຕ້ານຍິວໂດຍສັນ
ດານ ແຕ່ການບໍ່ໄດ້ຮັບໂທດຕອບແທນຫລັງຈາກຈັດການກັບເດັກ
ນ້ອຍຍິວຜູ້ເຄາະຮ້າຍທີ່ບໍ່ສາມາດປ້ອງກັນຕົວເອງນັ້ນເອງທີ່ຍິວະເຍ້ົ
ໃຫ້ມັນອາດຫານສ້າງຊື່ສຽງໂດ່ງດັງຂຶ້ນໃນນິຄົມ ໂດຍອາໄສຄວາມ
ຄ່ອງໄວ້ກ້າຫານແບບປະກົມປະການສັນດານດິບຂອງມັນເອງ.

ພວກເຮົາຕ້ອງໄດ້ຄິດແລ້ວຄິດອີກ ກ່ອນຈະລົງມືໄຂບັ້ນຕໍ່ສູ້ຕ້ານ
ກັບສາຍນັກກຸກກອນພວກນ້ີຢ່າງເປີດເຜີຍ, ການລົງມືດັ່ງກ່າວອາດ
ຊຸກດັນພວກເດັກນ້ອຍຍິວ ຕົກຢູ່ໃນສະພາວະຖືກບີບບັ້ງໂຫດກ່ວາ
ເກົ່າຊ້ໍາ. ແນ່ນອນວ່າ ອິດຊາຈິກັບພັກພວກຂອງມັນ ຈະບໍ່ຫລົ
ເວ້ັນການຫລົ້ນຫົ ຫລືວ່າພວກເຮົາຈໍາເປັນຕ້ອງຄ່ອຍໆລົງມືແບບ
ແນບນຽນກ່ວາເກົ່າ ຫລືວ່າ ເຮັດອັນໃດອັນຫນ່ຶ້ງເດັດຂາດລົງໄປ
ໂລດ.

ຂ້າພະເຈົ້າທົດລອງໃຊ້ວິທີການອັນທີຫນ່ຶ້ງ, ເປົ້າຫມາຍແມ່ນ
ຢາກແຍກ ອິດຊາຈິກັບຕາຮາແນດອອກຈາກຫມູ່. ສ່ວນ ກາຮາບາ
ນິບ, ມິເຕຍກິນ, ປຣິໂກດໂກ ແລະບູຮູນ ນັ້ນພວກເຂົາເຄີຍເຂ້ົ
ຂ້າງຂ້າພະເຈົ້າຢູ່ແລ້ວ, ຈ່ັງຊັ້ນຂ້າພະເຈົ້າຈ່ຶງກາງຕ່ໍພວກເຂົາ. ແຕ່
ສ່ິງດີທ່ີສຸດທ່ີພວກເຂົາໃຫ້ກັບຂ້າພະເຈົ້າໃນເທ່ືອນ້ີມີແຕ່ຄໍາສັນຍາ ທ່ີ
ວ່າຈະບໍ່ແຕະຕ້ອງ ພວກເດັກນ້ອຍຍິວເທ່ົານ້ັນ.

-ປ້ອງກັນພວກເຂົາຈາກຜູ້ໃດ? ຈາກທຸກຄົນໃນນິຄົມນີ້ຫວະ?

-ເຊນີຍ, ຢ່າເວົ້ານອກເລື່ອງ! ນ້ຳເອງກໍຮູ້ດີວ່າແມ່ນໃຜ! - ຂ້າພະເຈົ້າຕອບມັນຄືນ.

-ເອີ ເລ ສົມມຸດວ່າຂ້ອຍຮູ້ສາ ແລ້ວຊິໃຫ້ຂ້ອຍເຮັດແນວໃດ ລະ? ໃຫ້ຂ້ອຍປ້ອງກັນພວກເຂົາກະໄດ້ຄືກັນ ແຕ່ຊິໃຫ້ຂ້ອຍເຝົ້າ ແຍ ອິດສະໂຕຣມູກັບຫັ້ນຫມົດມື້ຊັ້ນຫວະ? ເກ໋ງຢ່າງໃດ ພວກ ເຂົາກໍຈະເອົາມັນຢູ່ຫັ້ນລະ, ແຮ່ງຈະຮ້າຍກ່ວາເກົ່າຊ້ຳລະເບາະ.

ມິເຕຍກິນ ນັ້ນບອກກັບຂ້າພະເຈົ້າຢ່າງກ໋ງໄປກ໋ງມາວ່າ:

-ຂ້ອຍເຮັດຫຍັງບ່ໄດ້ດອກ. ກ່ຽວກັບເລື່ອງນີ້ນ່າ, ມັນບ່ກ່ຽວ ກັບຂ້ອຍເລີຍ. ແຕ່ຂ້ອຍຊິບ່ເຮັດຫຍັງໃຫ້ພວກເຂົາດອກ, ຂ້ອຍບ່ ສົນໃຈພວກເຂົາຊ້ຳນ່າ!

ຊາໂດຣອບ ເປັນຜູ້ເຂົ້າໃຈຄວາມຮູ້ສຶກຂ້າພະເຈົ້າດີກ່ວາຫມູ່ໃນ ເລື່ອງນີ້ ແຕ່ມັນກໍບ່ສາມາດຊ້ຍັນຢ່າງປະຈັນຫນ້າກັບຄົນເຊັ່ນ ອິດ ຊາຈ, ເຂົາບອກກັບຂ້າພະເຈົ້າວ່າ:

-ບາງທີອາດຊິຕ້ອງໃຊ້ວິທີຮຸນແຮງເດ໊, ຂ້ອຍເອງກໍບ່ຮູ້ຄືກັນ, ພວກເຂົາປິດບັງຂ້ອຍ, ທ່ຳກັບເຈົ້ານັ້ນລະ, ຕ່ຳຫນ້າຂ້ອຍ ພວກ ເຂົາບ່ເຮັດຫຍັງໃຫ້ໃຜດອກ.

ແຕ່ໃນເວລານັ້ນ ສະພາບຂອງພວກເດັກນ້ອຍຍ໋ອນັບອັດຕະຄັດ ເຂົ້າ. ແຕ່ລະມື້ມີຜູ້ບອບຊ້ຳດ໋ຳຂອງແຕ່ເມື່ອຖືກຖາມ ພວກເຂົາກໍປະ ຕິເສດບ່ຍອມບອກຊື່ຜູ້ລ້ຽມ. ອິດຊາຈ໋ຍ່າງເບ່ງເລາະໄປເລາະມາຢູ່ ໃນນິຄົມທ້ັງກ້ົມແສງຕາ ຜ່ານຍອຍຜົມປົກຫນ້າອອກມາໃສ່ພວກຄູ ສອນ ແລະຂ້າພະເຈົ້າຢ່າງທ້າທາຍ.

ຂ້າພະເຈົ້າຕັດສິນໃຈໂດດກຳຄໍງູເຫົ່າໃນທັນທີ ໂດຍການສັ່ງໃຫ້ມັນມາຫາຢູ່ຫ້ອງການ. ມັນປະຕິເສດທຸກຢ່າງ ຢ່າງເດັດດ່ຽວ ແຕ່ແຝງທ່າທີໃຫ້ເຂົ້າໃຈວ່າ ມັນເຮັດພໍໃຫ້ຄື່ໆ ແຕ່ຄວາມຈິງແລ້ວມັນ ບໍ່ເອົາຫົວຊາຕໍ່ຄວາມນຶກຄຶດທີ່ຂ້າພະເຈົ້າມີຕໍ່ມັນຊ້ຳ.

- ນ້ຳຕີພວກເຂົາທຸກມື້!

- ບໍ່ເຄີຍຈັກເທື່ອເລີຍລະ! - ມັນຕອບຢ່າງບໍ່ຮ້ອນບໍ່ຫນາວ.

ຂ້າພະເຈົ້າຂູ່ວ່າຈະໄລ່ມັນອອກຈາກນິຄົມ.

- ເຊີນໄລ່ເທາະແມ້!

ມັນຮູ້ຢູ່ເຕັມຫົວໃຈວ່າ ການເຮັດຫນ້າສືເພື່ອຂັບໄລ່ຜູ້ຫນ້ຳອອກຈາກນິຄົມນັ້ນເປັນເລື່ອງຍືດຍາວຫຍຸ້ງຍາກພໍທຸງໃດ. ຈະຕ້ອງໄດ້ເຮັດລາຍງານອັນບໍ່ສຸດບໍ່ສ້ຽງເປັນຕໍ່ຄະນະກຳມາທິການ. ຂຽນຮ່າງຄຳກ່າວ ແລະຄຳຢັ້ງຢືນ, ສົ່ງກະໂຕ ອິດຊາຈິ ໄປສືບປາກຄວາມເປັນສືບໆເທື່ອ ແລະອ້າງພະຍານຫລັກຖານອີກເປັນລຸດໆ.

ຍິ່ງໄປກ່ວານີ້ ສຳລັບຂ້າພະເຈົ້າແລ້ວ ອິດຊາຈິບໍ່ໄດ້ເປັນທີ່ຫນ້າສົນໃຈພໍທ່ໃດ ສະມາຊິກນິຄົມທັງຫມົດຕິດຕາມວິວັດທະນາການຂອງມັນ, ຫລາຍຄົນອອນຊອນສະຫນັບສະຫນູນມັນ. ການໄລ່ມັນຫນີຈ່ຳອາດເປັນການແຜ່ກະຈາຍຄວາມເຫັນອົກເຫັນໃຈອັນນີ້ຕື່ມຂຶ້ນ, ຜູ້ຄົນຈະພາກັນຈື່ຈຳ ອິດຊາຈິໃນຖານະວິລະຊົນຜູ້ທີ່ທົນຮັບຄວາມທໍລະມານ, ຜູ້ບໍ່ກ້ວເກງໃຜບໍ່ຫວັ່ນເກງສິ່ງໃດ, ກ້າຕີເດັກນ້ອຍຍິວ ຈັ່ງຊັ້ນມັນຈ່ຳຖືກໄລ່ຫນີ. ເວົ້າແທ້ແລ້ວ ມັນກໍບໍ່ແມ່ນຜູ້ດຽວທີ່ຖືກກວນພວກເດັກນ້ອຍຍິວ, ຕາຣາເນດ ເອງເຊິ່ງບໍ່ແມ່ນຄົນປະເພດມັກຕ່ອຍຕີກໍໄດ້ປະພຶດຕົວຢ່າງສະຫລາດເລີກເຊິ່ງແບບໃຫມ່ອ່ອນ ແລະຄ່ອນ

ຄົນກ່ວາ. ມັນບໍ່ຕີພວກເດັກນ້ອຍຢ້ວຈັກເທື່ອ ແລະເມື່ອຢູ່ຕໍ່ຫນ້າ ຫລາຍຄົນ ມັນຍັງມີທ່າທີອ່ອນຫວານກັບພວກເຂົາຊ້ຳ ແຕ່ໃນຕອນ ກາງຄືນ ມັນຄ່ອຍໆຄານໄປຫາຜູ້ໃດຜູ້ຫນຶ່ງ, ເອົາເຈ້ຍຍັດໃສ່ງ່າມ ຕີນແລ້ວໃຕ້ໄຟໃສ່ ຈາກນັ້ນມັນກໍຫລົບໄປທຳທ່ານອນຫລັບຢູ່ໃນ ຕຽງຂອງມັນ. ບາງເທື່ອເມື່ອຫາມີດຕັ່ງເດີມໄດ້ ມັນກໍຊັກຊວນບັກ ຕຸ້ຍເຟໂດເຮັນໂກ ຫລືຜູ້ໃດຜູ້ຫນຶ່ງພັກພວກຂອງມັນມາຊ່ອຍຈັບ ຊະແນແດກ ໂກນຜົມໄປເຄິ່ງຫົວ ແລ້ວກໍອ້າງວ່າມີດຕັ່ງເດີເພ, ເຮັດໃຫ້ບັກນ້ອຍຜູ້ຮັບເຄາະຈາກຫົວຈຳຕ້ອງແລ່ນຕິດຕາມອ້ອນວອນ ຂໍໃຫ້ໂກນຜົມອີກເບື້ອງຫນຶ່ງໃຫ້.

ວາລະສຸດທ້າຍຂອງອະກຸສົນກຳເຫລົ່ານີ້ ອຸບັດຂຶ້ນຢ່າງບໍ່ຄາດຝັນ ທັງເປັນຕາອັບອາຍກ່ວາຫມູ່ຫມົດ.

ແລງມື້ຫນຶ່ງ ປະຕູຫ້ອງການຂອງຂ້າພະເຈົ້າໄຂປ໋ອະອອກ, ອິ ວານ ອີວາໂນວິດ ພາ ອິດສະໂຕຣມູກິບ ກັບຊະແນແດກເຂົ້າມາ, ຕີນຕີ໋ອຂອງພວກເຂົາທັງສອງອາບໄປດ້ວຍເລືອດ, ກິ່ນນ້ຳລາຍເປັນ ເລືອດ ແຕ່ບໍ່ຮ້ອງໃຫ້ພໍຄວາມຍ້ອນຢ້ານຈົນເປັນນິໄສ.

-ອິດຊາຈິເບາະ? - ຂ້າພະເຈົ້າຖາມຂຶ້ນ.

ຄູຢູ່ເວນຕອນກາງເວັນເລົ່າວ່າ ຕອນກົນເຂົ້າແລງ ອິດຊາຈິ ເກາະຜິດກັບ ຊະແນແດກ ເຊິ່ງຢູ່ຜ່ານຮັບໃຊ້ໃນໂຮງອາຫານ, ມັນ ຕ້ອງການໃຫ້ຝ່າຍນີ້ປ່ຽນອຸດອາຫານຂອງມັນ, ຢາກໄດ້ເຂົ້າຈີ່ຕ່ອນ ໃຫມ່ ແລະອ້າງວ່າ ເມື່ອຊະແນແດກກົ້ມຕັກແກ່ງໃຫ້ມັນນັ້ນໄດ້ເຮັດ ກ້ອຍແກ່ງຫ່ຽງຂ້າງເອົານິ້ວມືຈຸ່ມລົງໃນກ້ອຍແກ່ງ, ມັນລຸກຂຶ້ນຈາກ ໂຕະ ແລະຕໍ່ຫນ້າຕໍ່ຕາຄູເວນຄື ອິວານ ອີວາໂນວິດເອງກັບເດັກ

ນ້ອຍນິຄົນທ້າຫນົດ ມັນຟາດຫນ້າຊະແນແດກເຕັ້ນແຮງ. ຊະແນ ແດກຄົງຈະບໍ່ມີປາກມີສຽງຫຍັງອີກຢ່າງແນ່ນອນຢູ່ແລ້ວ ແຕ່ປາກົດ ວ່າຄູເຝິກບໍ່ແມ່ນຄວາຍ ແລະທີ່ຜ່ານມາກໍບໍ່ເຄີຍມີຈັກເທື່ອວ່າ ຈະມີ ເດັກນ້ອຍກ້າຫານຊຶກຕີກັນຕໍ່ຫນ້າຄູເວນກາງເວັນ. ອ໊ວານ ອ໊ວາໂນ ວ໊ດ ສັ່ງໃຫ້ອິດຊາຈິ ອອກຈາກໂຮງອາຫານມາສະເຫນີຕົວຕໍ່ຂ້າພະ ເຈົ້າ ເພື່ອຮັບໂທດສຳລັບຄວາມປະພຶດຂອງມັນ. ອິດຊາຈິ ຍ່າງ ອອກໄປພໍມາຮອດປະຕູກໍຢຸດ ແລະເວົ້າຂຶ້ນວ່າ:

-ຂ້ອຍຊິໄປຫາ ຜູ້ອຳນວຍການຢູ່ດອກ ແຕ່ກ່ອນຊິໄປຫານີ້ ຂ້ອຍຊິໃຫ້ມັນຮ້ອງເພງສູ່ຟັງກ່ອນ!

ມາຮອດຕອນນີ້ ກໍເກີດເລື່ອງມະຫັດສະຈັນຂຶ້ນ. ອິດສະໂຕຣມູ ກິບ ເດັກນ້ອຍຍິວຜູ້ຂີ້ໂຍ່ຍກ່ວາຫມູ່ບໍ່ສາມາດປ້ອງກັນຕົວເອງຈັກ ຫນ້ອຍນັ້ນໄດ້ໂດດອອກຈາກໂຕະມາໃສ່ອິດຊາຈິທັງເວົ້າວ່າ:

-ກູຊິບໍ່ປ່ອຍໃຫ້ມຶງ ແຕະຕ້ອງມັນອີກແລ້ວ!

ຜິດສຸດທ້າຍ ປາກົດວ່າ ອິດຊາຈິ ຟາດຫົວ ອິດສະໂຕຣມູກິບ ລົງກັບບາດຢູ່ກາງໂຮງອາຫານນັ້ນໂລດ ຈາກນັ້ນ ມັນຈົ່ງອອກມາແຕ່ ມາບເທັນ ຊະແນແດກທົ່ລີ່ຢູ່ທາງປະຕູເຂົ້າ ມັນເລີຍນ້ຳອີກບາດ ຫນຶ່ງຈົນຫມົ້ນີ້ແຂ້ວຟັ້ງອອກກັບບາດເຫລັ້ມຫນຶ່ງແລ້ວ ມັນກໍບໍ່ມາ ຫາຂ້າພະເຈົ້າ.

ຢູ່ໃນຫ້ອງການຂອງຂ້າພະເຈົ້າ ອິດສະໂຕຣມູກິບ ກັບ ຊະແນ ແດກ ເອົາແຂນເສື້ອເປື້ອນໆເຊັດເລືອດອອກຈາກໃບຫນ້າ ໂດຍບໍ່ ຮ້ອງໄຫ້ ແລະຍອມຮັບເອົາຄວາມພ່າຍແພ້ເປັນຂອງຕົນເອງຢ່າງຈະ ແຈ້ງ. ຂ້າພະເຈົ້າກໍເຊື່ອຄືກັນວ່າ ຖ້າບໍ່ສາມາດແກ້ໄຂຄວາມເຄັ່ງຕຶງ

ອັນນີ້ໃນທັນທີທັນໃດນີ້ໂລດແລ້ວ ພວກເດັກນ້ອຍຍິວ ກໍບໍ່ມີທາງ
ເລືອກອື່ນໃດ ນອກຈາກຫລົບຫນີໂດຍໄວ ຫລືກຽມຕົວຮັບເອົາ
ຄວາມທຸກທໍລະມານອັນໃຫມ່ອີກຕໍ່ໄປ. ຂ້າພະເຈົ້າເອງຮູ້ສຶກທໍ້ຖອຍ
ອ່ອນເພຍເປັນທີ່ສຸດ ເມື່ອເຫັນວ່າພວກເດັກນ້ອຍນິຄົມທັ້ງຫມົດ
ເມີນເສີຍຕໍ່ຄວາມປ່າເຖື່ອນອັນນີ້, ກະທັ່ງຮອດຄົນເຊັ່ນ ຊາໂດ
ຮອບ. ໃນເວລານັ້ນ ຂ້າພະເຈົ້າຮູ້ສຶກຕົວວ່າຕົນເອງໂດດດ່ຽວດຽວ
ດາຍເທົ່າໆກັບເວລາມາຢູ່ນິຄົມໃຫມ່ໆ. ແຕ່ໃນເວລານັ້ນ ຂ້າພະເຈົ້າ
ບໍ່ໄດ້ກາງຕໍ່ຄວາມເຫັນອົກເຫັນໃຈ ການສະຫນັບສະຫນູນຈາກໃຜ,
ຄວາມໂດດດ່ຽວຂອງຂ້າພະເຈົ້າເປັນສິ່ງທໍາມະດາ ແລະຂ້າພະເຈົ້າກໍ
ຮູ້ໄວ້ລ່ວງຫນ້າແລ້ວ ແຕ່ບັດນີ້ ຂ້າພະເຈົ້າຊຶມເຄີຍກັບການໄດ້ຮັບ
ຄວາມສະຫນັບສະຫນູນຢ່າງສະຫມໍ່າສະເຫມີ ຈາກພວກເດັກນ້ອຍ
ແລ້ວ.

ບັດນີ້ນອກຈາກພວກເຄາະຮ້າຍທັ້ງສອງແລ້ວ ຍັງມີຜູ້ຄົນອື່ນໆ
ອີກເຂົ້າມາໃນຫ້ອງການຂອງຂ້າພະເຈົ້າ. ຂ້າພະເຈົ້າຮ້ອງບອກຜູ້
ຫນຶ່ງວ່າ:

-ໄປເອົ້ນ ອິດຊາຈິ ມາ.

ຂ້າພະເຈົ້າເຊື່ອເກືອບຮ້ອຍສ່ວນຮ້ອຍວ່າ ຫລັງຈາກຖືກຈັບໄດ້
ຄາເຂົ້າປານນີ້ແລ້ວ ມັນຄົງປະຕິເສດບໍ່ຍອມມາ ແລະຂ້າພະເຈົ້າໄດ້
ຕັດສິນໃຈເດັດດ່ຽວແລ້ວວ່າ ຈະຕ້ອງຈັດການກັບມັນໃຫ້ໄດ້ ເຖິງຂັ້ນ
ໃຊ້ປືນພຸ້ນແລ້ວ.

ແຕ່ ອິດຊາຈິ ກໍມາ, ມັນກ້າວເຂົ້າໃນຫ້ອງການຂ້າພະເຈົ້າດ້ວຍ
ບາດກ້າວຊ້າໆ, ເສື້ອນອກພາດບ່າໄຫລ່, ມືທັ້ງສອງຈົກກົ່ງສົ້ງ

ແລະຍ່າງຕໍ່ຮະຕັ່ງອີ້ເຂົ້າມາ. ຕາຮາເມດຕິດຕາມມັນມາພ້ອມ, ຫມໍນີ້ເຮັດຄືວ່າເຫດການທີ່ເກີດຂຶ້ນນີ້ເປັນຫນ້າສົນໃຈພິລຶກ ແລະ ມັນມາກໃນຄວາມຫວັງຈະໄດ້ຊົມສາກສະແດງພິເສດຢ່າງຫນຶ່ງ.

ອິດຊາຈິ ແນມເບິ່ງຂ້າພະເຈົ້າໄປແບບທ້າທາຍ ແລ້ວເວົ້າວ່າ:

- ຂ້ອຍມາແລ້ວເດ້...ມີວຽກຫຍັງຫວະ?

ຂ້າພະເຈົ້າຊິໃຫ້ມັນເບິ່ງ ອິດສະໂຕຣມູກິບກັບຊະແນແດກແລ້ວ ເວົ້າວ່າ:

- ຫມາຍຄວາມວ່າແນວໃດ ນຶ່ງເຮັດແນວນີ້ ນໍ?

- ມີທໍ່ນີ້ຫວະ? ເວນຕາຍເອີ້ຍ ກະດຽວວ່າມີຫຍັງພິລຶກຫຶກຫນາ ຕີ້ນດອກ, ຂ້ອຍຄຶດວ່າເຈົ້າເອີ້ນມາເບິ່ງແນວຄັກໆ!

ໃນສ້ຽວວິນາທີນັ້ນ ຂ້າພະເຈົ້າຮູ້ສຶກວ່າ ພື້ນແຜ່ນດິນແຫ່ງຫລັກວິຊາຄູ ຢູ່ກ້ອງຕີນໄດ້ພັງຍຸບລົງສຽງກ້ອງສະນັ່ນ, ຂ້າພະເຈົ້າລອຍລ່ອງຢູ່ກາງຄວາມຫວ່າງເປົ່າ. ກະດານລຸກຄຶດທີ່ວາງຢູ່ເທິງໂຕະ ບືວໄປໃສ່ຫົວ ອິດຊາຈິ. ແຕ່ພາດໄປ ກະດານລູກຄຶດເລີຍໄປຕຳຝາຕົກລົງມາໃສ່ພື້ນຫ້ອງ.

ໂດຍບໍ່ສາມາດຄວບຄຸມສະຕິໄດ້ອີກແລ້ວ, ຂ້າພະເຈົ້າຊອກຫາຂອງຫນັກໆຢູ່ເທິງໂຕະ ແຕ່ແລ້ວໃນທັນທີທັນໃດນັ້ນ ຂ້າພະເຈົ້າກໍຄວາຈັບຕັ່ງອີ້ເງື້ອໃສ່ ອິດຊາຈິ ມັນຕົກຂະມ່າຢ້ານແຮງ ກອຍອອກໄປທາງປະຕູ ແຕ່ເສົ້ອນອກຫລຸດຈາກບ່າໄປຂ້ອງຕີນເຮັດໃຫ້ມັນລົ້ມລົງ.

ຂ້າພະເຈົ້າຮູ້ສຶກຕົວ, ຜູ້ໃດຜູ້ຫນຶ່ງດຶງບ່າຂ້າພະເຈົ້າໄວ້. ຂ້າພະເຈົ້າ ຫັນມາ, ຊາໂດຣອບຈົ້ງເບິ່ງຂ້າພະເຈົ້າທ້ຽມໃຫ້.

- ບໍ່ສົມໄປເສຍແຮງນຳຄົນຊື່ໆຈັ່ງຊີ້ດອກ!

ອິດຊາຈິນັ່ງຢູ່ກັບພື້ນເຮືອນ ມັນສະອຶ້ນໃຫ້ທິດໆຂຶ້ນມາ. ຕາຣາແນດເອງກໍມີຫນ້າເມື່ນຈິດພໍປານຄົນຕາຍ, ພິສົບສັ່ນຍິກໆ, ມັນຄ່ອຍໆຫລົບໄປນັ່ງຢູ່ແຄມປ່ອງຢ້ຽມ.

- ມຶງກະຄືກັນ, ມຶງອອນຊອນນຳການກຸກກວນພວກເດັກນ້ອຍຫມູ່ນີ້ນຳ! ຂ້າພະເຈົ້າເວົ້າໃສ່ມັນ.

ຕາຣາແນດ ໂດດລົງຈາກແຄມປ່ອງຢ້ຽມ.

- ຂ້ອຍໃຫ້ສັນຍາກັບເຈົ້າວ່າຈະບໍ່ເຮັດອີກຈັກເທື່ອ.

- ອອກໄປດຽວນີ້!

ມັນຍ່າງຍ່ອງຕົນອອກໄປຈາກຫ້ອງ.

ໃນທີ່ສຸດ ອິດຊາຈິ ກໍລຸກຂຶ້ນ, ມືຫນຶ່ງຈັບເອົາເສື້ອໃຫຍ່ ອີກມືຫນຶ່ງຟ້າວລຶບຮ່ອງຮອຍອາລົມອ່ອນແອ ຄືນ້ຳຕາເມັດຫນຶ່ງທີ່ຕິດຢູ່ເທິງຜິວແກ້ມຫຍາບໆຂອງມັນ. ມັນແນມເບິ່ງຂ້າພະເຈົ້າດ້ວຍທ່າທາງເຄັ່ງຂຶມສະຫງົບສະຫງຽມ.

- ມຶງໄປຂັງຢູ່ໂຮງແປງເກີບ ๔ ມື້, ໃຫ້ກິນແຕ່ເຂົ້າກັບນ້ຳລ້າເທົ່ານັ້ນ!

ມັນສົ່ງຮອຍຍິ້ມບ້ຽວໆອອກມາບາດຫນຶ່ງ ແລະຕອບຢ່າງບໍ່ລັ່ງເລວ່າ:

- ເຈົ້າ...ຂ້ອຍຊິໄປ.

ຮອດມື້ທີສອງ ມັນຮ້ອງຂໍໃຫ້ຂ້າພະເຈົ້າໄປພົບມັນຢູ່ໂຮງແປງເກີບ ແລະເວົ້າວ່າ:

- ຂ້ອຍຈະບໍ່ເຮັດແນວນີ້ອີກແລ້ວ, ຍົກໂທດໃຫ້ແດ່!

- ແລ້ວຈົ່ງວ່າກັນໃນມື້ນຶ່ງພັນໂທດ.

ຮອດມື້ທີ່ສັນກໍ່ນ່ວນໃຈ ບໍ່ຮັບການອະໄພໂທດ ແຕ່ເວົ້າອອກ ມາຢ່າງເສົ້າໆວ່າ:

- ຂ້ອຍຊິອອກຈາກນິຄົມ.
- ເຊີນຕາມສຳບາຍ!
- ໃຫ້ຫນ້າສືຂ້ອຍແດ່.
- ກູບໍ່ໃຫ້ຫຍ້າງຫນິດ!
- ຊັ້ນຂ້ອຍຂໍລາກ່ອນ!
- ໂຊກດີເທາະ!

ບົດທີ ๑๔

ບອກນ້ຳເມິກສຳລັບເພື່ອນບ້ານທີ່ດີ

ພວກເຮົາບໍ່ຮູ້ວ່າ ອິດຊາຈິ ໄປທາງໃດ ບາງຄົນເວົ້າວ່າມັນໄປ ຕາດຊະເກັນ ເພາະວ່າຢູ່ພຸ້ນ ອັນໃດໆກໍ່ງ່າຍຫນິດ ໃຜໆກໍ່ສາມາດດຳ ລົງຊີວິດແບບສຳລານຄົກຄະນອງໄດ້ຢ່າງສຳບາຍ ແຕ່ຫລາຍໆຄົນຊ້ຳ ເວົ້າວ່າ ອິດຊາຈິ ມີລຸງຄົນຫນຶ່ງຢູ່ໃນເມືອງຫລືວ່າ ບາງທີມັນອາດຊິ ໄປພັກຢູ່ກັບຫມູ່ຜູ້ຫນຶ່ງຊຶ່ງເປັນຄົນຂັບລົດມ້າກໍ່ໄດ້.

ຫລັງຈາກທີ່ຫມັ້ນວິຊາການຄູຂອງຂ້າພະເຈົ້າ ຫັກໂຄ່ນລົງສິດໆ ຮ້ອນໆນີ້ແລ້ວ ຂ້າພະເຈົ້າກໍ່ບໍ່ຮູ້ວ່າຈະສະແຫວງຫາຄວາມທຸ່ນທ່ຽງ ຄືນໄດ້ແນວໃດ, ພວກເດັກນ້ອຍປຸ້ນມາສ້ຳສິນວ່າຮູ້ຈັກຂ່າວຄາວກ່ຽວ ກັບອິດຊາຈິແດ່ບໍ່.

- ແມ່ນພວກເຈົ້າສົນໃຈຫຍັງນຳອີດຊາຈິແທ້? ສູເປັນທຸກນຳມັນຊັ້ນຫວາ? - ຂ້າພະເຈົ້າຖາມຂຶ້ນ.

- ບໍ່ ພວກເຮົາບໍ່ໄດ້ທຸກຫມິກທຸກໃຈຫຍັງນຳມັນດອກ ພຽງແຕ່ຄຶດວ່າ ຄັນມັນກັບຄືນມາຢູ່ຫນີ້ກະຄືດີກວ່າ ເອີ...ສຳລັບເຈົ້າຫັ້ນນ່າ.

- ບໍ່ເຂົ້າໃຈເວີ້ຍ.

ກາຣາບານິບ ເສືອດຕາເບິ່ງຂ້າພະເຈົ້າ ພໍປານມັນເປັນຫມໍຜີແກ່ວ່ອີຊາ:

- ບາງທີ ອາດເປັນໄປໄດ້ວ່າ ເຈົ້າບໍ່ໄດ່ສະບາຍໃຈປານໃດຕໍ?

ຂ້າພະເຈົ້າຮ້ອງກ້ານໃສ່ມັນວ່າ:

- ນຶ່ງຊິໄປຕາຍທາງໃດກະໄປເນີ ບໍ່ຕ້ອງມາກັງວົນນຳຈິດໃຈກູດອກ. ສູຄຶດວ່າແນວໃດຮຶ...ບັດນີ້? ຫົວໃຈກູກະຕ້ອງໃຫ້ສູເບິ່ງແຍງຊັ້ນຫວະ?

ກາຣາບານິບ ກອຍຫນີໄປນຶດໆ.

ໃນລະຍະນັ້ນ ນິຄົມກັບຄືນມີຊີວິດຊີວາຫນ້າອອນຊອນອີກ, ຂ້າພະເຈົ້າຫງ່ຽງຫູຟັງກ້ອຍທຳນອງດົນຕີອັນສົດໃສ ແລະຄ່ອຍເບົາຂອງມັນຢູ່ເປັນນິດ, ຢູ່ຊື່ບ່ອງຍ້ຽມຂອງຂ້າພະເຈົ້າມີສຽງເວົ້າຍອກໄຍ, ສຽງເລົ່າເລື່ອງຕະຫລົກຂອງພວກເດັກນ້ອຍໃນລະຫວ່າງການພັກງານດັງກ້ອງຂຶ້ນມາ (ບໍ່ມີໃຜຮູ້ວ່າເປັນຫຍັງ ທຸກສິ່ງທຸກຢ່າງຈຶ່ງມາເຕົ້າໂຮມກັນຢູ່ບ່ອນຫນີ້), ປາກົດວ່າບໍ່ມີໃຜຈື່ມວ່າໃຫ້ໃຜ. ແລະມື້ຫນຶ່ງເອີກາເຕີຣີນາ ກຣີກໍເຮັບນາ ກໍມາເວົ້າກັບຂ້າພະເຈົ້າດ້ວຍກ້ອຍທຳນອງຂອງນາງພະຍາບານກັບຄົນເຈັບຫນັກວ່າ:

- ເຈົ້າບໍ່ຕ້ອງວິຕົກກັງວົນຫລາຍດອກ, ທຸກຢ່າງຈະຄ່ອຍເຊົາໄປ ເອງ.

- ຂ້ອຍບໍ່ໄດ້ວິຕົກກັງວົນຫຍັງນ່າ, ມັນຫາກຈະເຊົາໄປເອງ. ແມ່ນຄວາມເຈົ້າ, ແລ້ວນິຄົມເຮົາເປັນແນວໃດລະບັດນີ້?

- ຂ້ອຍເອງກໍບໍ່ຮູ້ຈະເວົ້າແນວໃດກືກ. ທຸກຢ່າງດຳເນີນໄປໂດຍ ດີ, ນິຄົມມີລັກສະນະມະນຸດສະທຳຫລາຍຂຶ້ນ, ຈະວ່າແນວນີ້ກໍໄດ້. ພວກເດັກນ້ອຍຍິວຂອງເຮົາກໍເປັນຕາແພງຫລາຍ, ພວກເຂົາຍັງຂີ້ ຢ້ານຢູ່ແດ່, ເຮັດວຽກເກັ່ງພິເສດ ແຕ່ຮ້ອນຮົນກະວົນກະວາຍໃຈ ເກັ່ງທີຫນຶ່ງ. ເຈົ້າຮູ້ຕົວ່າ ບັດນີ້ພວກຮຸ່ນໃຫຍ່ຫັນມາເອົາໃຈໃສ່ເບິ່ງ ແຍງພວກເຂົາແລ້ວ. ມີເຕຍກົນ ນັ້ນເຮັດໜ້າທີ່ເປັນແມ່ລ້ຽງເດັກ ເອົາຊື່ໆ, ມັນບັງຄັບໃຫ້ ເກລເຊ ອາບນ້ຳ, ຕັດຜົມໃຫ້ມັນກະທັ້ງ ຮອດຫຍິບກະດຸມໃຫ້ມັນກໍເຮັດໃດ໋!

ແມ່ນແລ້ວທຸກຢ່າງດຳເນີນໄປຢ່າງວິເສດສຸດ ແຕ່ວ່າໃນຈິດສຳ ນຶກຫລັກຫມັ້ນວິຊາຄູຂອງຂ້າພະເຈົ້ານີ້ ມັນຊ່າງສັບສົນເອົາແທ້ ເອົາວ່າ! ແນວຄຶດອັນນີ້ກຸກກອນຂ້າພະເຈົ້າຢູ່ຕະຫລອດເວລາ: ຂ້າພະເຈົ້າຈະບໍ່ຄົ້ນພົບຄວາມລຶ້ລັບອັນນັ້ນຈັກເທື່ອຫວະ? ທັງໆທີ່ ຂ້າພະເຈົ້າເຄີຍເຊື່ອວ່າໂຕເອງຄຸບມັນໄວ້ໄດ້ ແລ້ວບັດນີ້ຍັງແຕ່ຈະກຳ ເອົາມັນໄວ້ເທົ່ານັ້ນ. ມາຮອດເວລານັ້ນ ພວກເດັກນ້ອຍຫລາຍຄົນ ແນມເບິ່ງຂ້າພະເຈົ້າດ້ວຍແສງຕາແວວວາວພິເສດແລ້ວ... ແຕ່ ແລ້ວ...ໃນພິບຕາດຽວທໍ່ນັ້ນ ທຸກຢ່າງໄດ້ພັງທະລາຍລົງຢ່າງຫນ້າ ອັບອາຍ! ຂ້າພະເຈົ້າຈຳເປັນຕ້ອງເລີ່ມຕົ້ນໃຫມ່ຫມົດຫວະ?

ຂ້າພະເຈົ້າເຈັບໃຈໂກດແຄ້ນ ຍ້ອນຄວາມຫຍາບຊ້າຂອງວິທະ

ยากามทางด้านอีชาคู และ ความขาดพะลังในทางอีชาชีบ ของตินเอง, และข้าพะเจ้าก็คิดเห็นอีชาคูด้วยความเบื่อหน่าย และแค้นเคืองว่า:

"มันมีมาจั่งชีจักกี่พันปีแล้ว! มีคินที่สะหลาดส่องใสมาท่ำใดแล้ว เบิ่งเอิาเทาะบ่จักอ่า แปสตาลิดชี, ธูโฆ, นาตอธ, บลิงสะกี! มีปื้มจักหิอ, เจ้ยจักหน้า, ความยิ่งใหย่โด่งดัง! แต่ปานนั้น มันยังหว่างเบิ่าอู่, แม่นความปอดภังบ่มีหยังหมิด, บ่มีใผสามาดบอกข้าพะเจ้าได้อ่า ต้องสู้ธิบกับชาอหนุ่มอันตะพานแนอนี้แบบใด! มันบ่มีอีหิการใดๆ อีกแล้อ, บ่มีตักกะสาดบ่มีหยังหมิด! ทุกสิ่งทุกย่างสับสิน บ่มีสั้นบ่มีปาย!"

ข้าพะเจ้าเสยใจห่วงไย อีดชาจิ หน้อยกว่าหมู่, บันหึกช็มันเข้าในบันชีผินเสย, ก็อ่ามันแม่นผะลิดตะผินเสดเหลือหึ่ตลึกเอ้นบ่ได้อยู่ในอีสาหะกิดหน่ำๆ. นอกนี้การจากไปย่างสะบายอาลมของมันยังเธ็ดให้ข้าพะเจ้า เสยใจหน้อยลิงไปอีก, เพาะอ่าบ่คิน มันก็กับคืนมา.

ดดการร้ายแรงอีกอันหน่ำตำใส่พวกเราอีกจินอ่า เมื่อข้าพะเจ้าได้ฮ่าวมันนั้น ข้าพะเจ้าจ่ำเข้าใจอ่า อันที่เผิ่นเว้าอ่า ลินหิอลุกนั้นเป้นแนอใด.

ในคืนหนาอเย้น เป้นน้ำก้ามคืนหน่ำ เด็กน้อยนิคมก้อกกีจำนอนหน่ำนับทั่า อีดชาจินำได้เกิดผิดหฝ่งกับชาอหนุ่มบ้าน ปิธอบกา. การผิดหฝ่งดำเนินไปเกิ่งลั้นลิงมื่ใส่กันด้วย

ອາວຸດ. ຝ່າຍຫນຶ່ງໃຊ້ອາວຸດງ່າຍດຶກແຫລມ ແມ່ນຝ່າຍເດັກນ້ອຍ ພວກເຮົາທີ່ໃຊ້ອາວຸດນີ້, ສ່ວນຝ່າຍຫນຶ່ງໃຊ້ອາວຸດດ້າງຄືບັນຍາວ. ການຕໍ່ສູ້ສຸດລົງໂດຍຝ່າຍພວກເຮົາເປັນຝ່າຍມີໄຊ. ພວກຊາວຫນຸ່ມ ໄທບ້ານ ກົກຕົກຍອຍຈາກທົ່ວຫມັ້ນຫລົບເຂົ້າໄປລີ້ຢູ່ໃນຕົກສະພາໂຊ ວງດບ້ານຢ່າງຫນ້າອັບອາຍ. ໃນເວລາບ່າຍສາມໂມງເຊົ້າ, ຕົກສະ ພາຖືກບຸກຍຶດໄດ້ ຫມາຍຄວາມວ່າ ມີການພັງປະຕູປ່ອງຢ້ຽມເຂົ້າ ໄປຕໍ່ສູ້ກັນແບບໃຊ້ກຳລັງຕິດຕາມກັນຢ່າງຮຸນແຮງ ຝ່າຍກອຍໂດດ ອອກຕາມປ່ອງຮູຕ່າງໆແລ່ນເຂົ້າເຮືອນໃຜເຮືອນມັນ. ສ່ວນພວກ ເດັກນ້ອຍເຮົາກໍກັບຄືນມານິຄົມຢ່າງຜູ້ມີໄຊ.

ອັນເປັນຕາຫນ່າຍກ່ວາຫມູ່ ກໍແມ່ນສະພາບເປ່ເພຂອງຕົກສະ ພາໂຊວງດບ້ານ ຈົນເພິ່ນບໍ່ສາມາດເຂົ້າໄປນັ່ງເຮັດວງກໄດ້ໃນເຊົ້າ ມື້ຕໍ່ມາ. ນອກຈາກທຳລາຍປະຕູປ່ອງຢ້ຽມແລ້ວ ພວກບຸກຮຸກຍັງ ມ້າງໂຕະຕັ່ງ, ຢາຍເຈ້ຍຊະຊາຍ ແລະທຸບບອກນ້ຳເມິກອີກ.

ໃນຕອນເຊົ້າ ພວກຊາຍໂຈນຫນຸ່ມກໍຕື່ນຈາກນອນຢ່າງໄຮ້ດ ງ ສາພໍປານແອ້ນ້ອຍເກີດໃຫມ່, ພວກເຂົາອອກໄປເຮັດວງກເສີຍໆຄື ບໍ່ມີຫຍັງເກີດຂຶ້ນ. ໃນຕອນທ່ຽງປະທານສະພາໂຊວງດບ້ານປຶຣອບ ກາ ມາຫາຂ້າພະເຈົ້າ ແລະເລົ່າເຫດການທີ່ເກີດຂຶ້ນໃນຕອນກາງ ຄືນຜ່ານໄປນັ້ນສູ່ຂ້າພະເຈົ້າຟັງ.

ຂ້າພະເຈົ້າຕົກຂະໜ່ ຈົ້ງເບິ່ງຊາຍຊະລາຜູ້ຊົງວ່ອງໄວສະຫລ ວ ສະຫລາດຄົນນີ້ຢ່າງອັດສະຈັນໃຈ. ຂ້າພະເຈົ້າບໍ່ເຂົ້າໃຈວ່າ ເປັນ ຫຍັງລາວຈົ່ງມາໂອ້ລົມກັບຂ້າພະເຈົ້າຢູ່ຫນີ້ ແທນທີ່ຈະເອົ້ນຕຳ ຫລວດມາຈັດການກັບພວກອັບປີຫມູ່ນີ້ໂຮມຫົວຂ້າພະເຈົ້ານຳ.

ແຕ່ລຸງປະທານບໍ່ສະແດງວ່າໂກດແຄ້ນຫຍັງ ນອກຈາກເສົ້າໃຈ ແດ່ ແລະມີຄວາມສົງໄສເປັນພິເສດ, ລາວຢາກຮູ້ແຕ່ວ່າທາງນິຄົມ ຈະຮັບປົວແປງປະຕູປ່ອງຢ້ຽມໂຕະຕັ່ງໃຫ້ຫລືບໍ່ ແລະໂດຍສະເພາະ ໃນດວງນີ້ທາງນິຄົມຈະສາມາດເບີກນ້ຳເມິກໃຫ້ລາວໄປໃຊ້ກ່ອນຈັກ ສອງບອກໄດ້ບໍ.

ຂ້າພະເຈົ້າຮູ້ສຶກອັບອາຍຢ່າງບອກບໍ່ຖືກ ທັງບໍ່ສາມາດເຂົ້າໃຈ ເຫດຜົນຂອງທ່າທີອັນ "ຫນ້າເສົ້າໃຈ" ທີ່ສຸດອັນນີ້ຈາກຝ່າຍອຳ ນາດການປົກຄອງໄດ້. ຕໍ່ມາ ຂ້າພະເຈົ້າຕັດສິນເອົາເອງວ່າ ປະທານ ສະພາກໍຄິດຄືກັບຂ້າພະເຈົ້າໃນເວລານັ້ນແຫລະ ຄືບໍ່ທັນເຂົ້າໃຈເຖິງ ຄວາມຮ້າຍຂາດຂອງອຸບັດເຫດອັນນີ້ເທື່ອ. ລາວເວົ້າຈົ່ມພຸມພຳອີ ຫຍັງອອກມາກໍພຽງເພື່ອສະແດງວ່າໄດ້ເຮັດອັນໃດອັນຫນຶ່ງອອກໄປ ແລ້ວເທົ່ານັ້ນ.

-ອ່າ...ແມ່ນແລ້ວ! ແມ່ນຈັ່ງຊັ້ນແລ້ວ! -ຂ້າພະເຈົ້າເອງກໍບໍ່ ຮູ້ຈະເວົ້າຫຍັງ ໄດ້ແຕ່ຈົ່ມນຳຫລັງລາວດັ່ງນີ້: -ແນ່ນອນ ພວກ ເຮົາຈະສ້ອມແປງທຸກສິ່ງທຸກຢ່າງ, ບອກນ້ຳເມິກຫວະ...ເຊີນ, ເອົາ ໄດ້.

ລຸງປະທານຍຶບມັນຂຶ້ນມາໄວ້ໃນມືກ້ຳຂວາ ແລ້ວອຸ້ມມັນຫນີບ ໃສ່ທ້ອງ. ບອກນ້ຳເມິກນັ້ນແມ່ນຊະນິດທຳມະດາ, ຂວ້ຳໄດ້.

-ເຈົ້າໆ, ພວກເຮົາຈະສ້ອມແປງທຸກຢ່າງໃຫ້, ຂ້ອຍຈະສົ່ງ ຊ່າງໄມ້ໄປເບິ່ງດວງນີ້ລະ, ແຕ່ສຳລັບແຜ່ນແກ້ວນັ້ນ ຕ້ອງຖ້າໃຫ້ ພວກເຮົາໄປສັ່ງເອົາມາແຕ່ໃນເມືອງກ່ອນ.

ລຸງປະທານແນມເບິ່ງຂ້າພະເຈົ້າ, ແສງຕາສາຍແວວຮູ້ບຸນຄຸນ.

-ບໍ່! ມ້ອນກະໄດ້ບໍ່ເປັນຫຍັງ. ເອົາເມື່ອໃດພວກເຈົ້າມີແຜ່ນແກ້ວຫັ້ນລະ ເຮັດຊ່ອຍກັນເອົາ...ວ່າແນວນັ້ນເນາະ...

-ຕົກລົງ, ຈ່ຳຊັ້ນພົບກັນມ້ອນ.

ແຕ່ວ່າເປັນຫຍັງ ລາວບໍ່ລາຄວາມລົມຂ້າພະເຈົ້າລະ? ລາວມີຫຍັງອີກຊັ້ນຫວະ? ລຸງປະທານໃຈດີຄືນນີ້ນໍ່ະ!

-ບັດນີ້ເຈົ້າຊິເມືອແລ້ວແມ່ນບໍ່? -ຂ້າພະເຈົ້າຖາມ.

-ເຈົ້າໆ.

ປະທານບ້ານກົ້ມແສງຕາໄປອ້ອມໆຕົວ, ຈົກເອົາແພນົນສີເຫລືອງອອກມາເຊັດຫນວດເຊິ່ງສະອາດດີຢູ່ແລ້ວ ລາວຫັນເຂົ້າມາໃກ້ຂ້າພະເຈົ້າແລ້ວເວົ້າຂຶ້ນວ່າ:

-ສຳລັບເລື່ອງມ້ວານນີ້ຫັ້ນເນາະ...ເຈົ້າ ເຈົ້າ ເຂົ້າໃຈຂ້ອຍບໍ່, ພວກເດັກນ້ອຍຂອງເຈົ້າໄດ້ຍາດເອົາ...ຄືຮູ້ນີ້ນລະຄົນຫນຸ່ມເປັນແນວໃດ...ສ່ວນລູກຊາຍຂອງຂ້ອຍຢູ່ຫັ້ນຄືກັນ. ພວກຊາວຫນຸ່ມເຂົາຫາກເຮັດໄປຈ່ຳຊັ້ນລະ ເພື່ອຫລິ້ນໆດອກ ບໍ່ແມ່ນເພື່ອຢ່າງອື່ນເລີຍ...ຂອບໃຈພະເປັນເຈົ້າ ເຫັນຫມູ່ນີ້ນັ້ນກະເລີຍຢາກມີຄືກັນ... ມັນເປັນແນວນັ້ນລະ ແຕ່ລະຄົນກໍຢາກມີຂອງໃຜຂອງມັນ.

-ແມ່ນເຈົ້າເວົ້າຮອດເລື່ອງຫຍັງເນາະ? ຂໍໂທດເດີ, ຂ້ອຍບໍ່ເຂົ້າໃຈນ່າ!

-ກະປືນຫັ້ນແລ້ວ. -ປະທານບ້ານເວົ້າອອກມາແຈ້ງໆ.

-ປືນອັນໃດ?

-ກະຢັງວ່າປືນ.

-ແລ້ວເປັນແນວໃດລະ?

- ฟ้าเอ๋ย! ข้อยเว้าแล้วบ่า... พวกเขาบ้ากับย้อน...มื้อวานนี้ละ, พวกเด็กน้อยเจ้าสามาดยึดมาได้กะบอกหม่ำจากลูกสาวข้อย, แล้วยังยากเอานำพวกเด็กน้อยข้อยได้อีกบอกหม่ำต่างหาก ซาอ่าพวกเขาเธ็ดมันเสียไปกะบ่จักดอก...ซองว่าพวกเขากินเหล้ากันเมาแด่, ข้อยยากฮู้แท้ๆว่า แม่นพวกเขาไปเอาเหล้าอิดกาเกื่อนหมู่นี้มาแต่ใสกะด๋!

- แล้วมีใผเมาแด่ละ?

- แม่นใผแด่ฉั้นหอะ? โอ้ยเธ็ดแนวใดข้อยจ่ำฉิฮู้นำข้อยกะบ่ได้ผู้ชั้นนำ, ตามเขาเว้ากันชั้นกำว่าคนพวกเจ้าเมาหมิด...

- แล้วคนของเจ้าเด้?

ปะหานบ้านมีท่าทีสั่งเลื้อน:

- ก็ได้บอกเจ้านั้นแล้ว ข้อยเองกะบ่ได้ผู้นำเขา... แล้วกะมื้อวานนี้ กะแม่นอันหึด, แต่ข้อยบ่เว้าธอดเลื่องนี้ดอก. พวกเขายังหนุ่มยังน้อย, เด็กน้อยเจ้ากะถือกัน, ข้อยบ่มีหยังต้านพวกเขาดอก, พวกเขาตีกัน บ่มีใผตาย บ่มีใผเจ็บกะบ่นั้น...บางทีฝ่ายเจ้ามีผู้ใดผู้หม่ำเจ็บบ่จักเด้? - ลาวกามฮ้องแบบกะทันหัน, ท่าทางย้านกิว.

- ข้อยบ่ทันได้เว้ากับพวกเขาเทื่อ.

- ข้อยกะบ่ฮู้หยังดอก, แต่มีคนเว้าให้ข้อยฟังว่ามีสามปืนดังฮ้องหลายบาด, บางทีอาดสองบาด...ถือแม่นตอนพวกเขาหลิบหนีมา เมื่อเห็นพวกเด็กน้อยของเจ้า, ถือเจ้ารู้นั้น

ລະເນາະ, ພວກເຂົາຢາກເລືອດຮ້ອນແດ່, ສ່ວນວ່າເດັກນ້ອຍໄທ ບ້ານກະຄືວ່ານັ້ນລະນໍ...ຕ້ອງໃຊ້ເວລາແດ່... ຮ໊ຶ ຮ໊ຶ ຮ໊ຶ!!!

ຊາຍຊະລາ ຫົວທັ້ງຫລໍ່ຕາຄູ່ຫົບຮີ່ຂອງລາວແບບຄົນໃຈດີ, ລາວເຮັດຄືວ່າເປັນຄົນຝ່າຍພວກເຮົາຈັ່ງຊັ້ນລະ. ຜູ້ເກົ້າແບບນີ້ ພວກເຮົາມັກເອີ້ນວ່າ "ພໍ່ເກົ້າໃຈບຸນ". ຂ້າພະເຈົ້າເອງກໍຫົວຂົ້ນຄືກັນ ເມື່ອແນມເບິ່ງລາວ ທັ້ງໆທີ່ຮູ້ສຶກວ່າຢູ່ໃນວົນຍານພຸ້ນ ທຸກຢ່າງຍັງສັບສົນຫຍຸ້ງເຫຍີງຢູ່.

-ຊັ້ນແປວ່າ ຕາມເຈົ້າເບິ່ງແລ້ວ ກໍບໍ່ມີຫຍັງຮ້າຍແຮງເນາະ: ພວກເຂົາຕີກັນ ແລ້ວຕໍ່ໄປກໍດີກັນຄືນ, -ຂ້າພະເຈົ້າອອກຄວາມເຫັນ.

-ເອີ່ຈັ່ງຊັ້ນລະ, ແມ່ນແນວນັ້ນລະ, ພວກເຂົາຊິດື່ມນ້ຳກັນຄືນ, ຕອນຂ້ອຍຍັງຫນຸ່ມນັ້ນ ກໍຕີກັນຍ້ອນຜູ້ສາວຄືກັນແຮ່ງພີ່ລືກກ່ວານີ້ ຫລາຍ, ຢາກົບ ອ້າຍຂ້ອຍນັ້ນ ກໍຕີຈົນວ່າຕາຍຄືນຟຸ້ນລະນໍ. ເຈົ້າເອີ້ນເດັກນ້ອຍເຈົ້າມາໂອ້ລົມຈັກຫນ້ອຍ ເພື່ອບໍ່ໃຫ້ເກີດເລື່ອງແນວຄ້ຶກກໍພຽງພໍແລ້ວ.

ຂ້າພະເຈົ້າອອກມາລະບຽງ.

-ເອີ້ນພວກໄປ ປິຣອບການ້ອງນີ້ມາ.

-ແລ້ວພວກທີ່ວ່ານີ້ມີໃຜແດ່ລະ? ບັກນ້ອຍໆຫນໍ່ງທີ່ແລ່ນຜ່ານເດີ້ນມາ ເພື່ອເຮັດວຽກງານດ່ວນອັນໃດອັນຫນໍ່ງ ຮ້ອງຖາມຂ້າພະເຈົ້າ.

-ແລ້ວນ້ຳບໍ່ຮູ້ຊັ້ນຫວະວ່າມີໃຜແດ່ໄປ ປິຣອບການ໋ະ?

-ໂອ້ຍ! ເຈົ້ານີ້ ຈັ່ງແມ່ນພິລຶກຫລາຍ... ຂ້ອຍຊິເອົ້ນ ບູຮຸນມາ ໃຫ້ເຈົ້າດີກ່ວາ.

-ເອ໊ົ...ເອ໊ົ້ນັ້ນມາ!

ບູຮຸນ ປາກົດຕົວຂຶ້ນທີ່ປາກປະຕູ.

-ອິດຊາຈິ ກັບມາຢູ່ນີ້ຄືນອີກຊັ້ນຫວະ? -ຂ້າພະເຈົ້າຖາມມັນ.

-ເຈົ້າ ມັນກັບມາເພື່ອເຮັດວຽກຢູ່ໂຮງຊ່າງໄມ້.

-ມຶ່ງໄປບອກມັນວ່າຈັ່ງຊີ້ເດ໊: ມ໊ືອານ້ີ ມ໊ືຄືນພວກເຮົາລ໋ົງ ໄປອາລະວາດຢູ່ບ້ານ ປ໊ືຮອບກາ ແລະມັນກໍກາຍເປັນເລື່ອງຮ້າຍ ແຮງແລ້ວ.

-ຂ້ອຍຮູ້ແລ້ວ, ໄດ້ຍິນພວກເຂົາເວົ້າຮອດຢູ່.

-ດີແລ້ວ, ຈັ່ງຊັ້ນໄປບອກ ອິດຊາຈິ ພາຫມູ່ມາຫາກູຫມ໊ືດທຸກ ຄົນພວກເຂົາ ລຸງປະທານບ້ານ ລກ໋າຢູຫອງການ. ບອກພວກເຂົາ ລະວັງ, ຢ່າຕ໊ອະເປັນອັນຂາດ ບ່ໍ້ຊັ້ນ ເລື່ອງມັນຊິບ່ໍ້ງາມປານໃດວ່າ ຊັ້ນເດ໊!

ບ່ໍ້ດົນຫ້ອງການຂອງຂ້າພະເຈົ້າກໍ່ອັ່ງອໍໄປດ້ວຍພວກເດັກນ້ອຍ ທ໊ີ ໄປທ່ຽວ ປ໊ືຮອບກາ ຄ໊ື: ອິດຊາຈິ, ປຣ໊ືໂກດໂກ, ໂຊບ໊ິດ, ໂອປຣ໊ືສ ໂກ, ກາລາແຕ້ງໂກ, ໂກໂລສ, ແລະຜູ້ອ໊ື່ນໆອີກຈ໋ໍານວນຫນ໊ຶ່ງ ຊ໋ົ່ງຂ້າພະເຈົ້າຈ໊ື່ບ່ໍ່ໄຫວ. ອິດຊາຈິວາງທ່າທ໊ີສະຫງ໊ົບເສ໊ີຍຄ໊ືກັບວ່າ ມັນບ່ໍ້ເຄ໊ີຍມ໊ືເລື່ອງຫຍັງກັບຂ້າພະເຈົ້າ ແລະເມ໊ື່ອຢູ່ຕ໋ໍ່ຫນ້າຄົນແປກ ຫນ້າເຊ້ັ່ນນ້ີ ຂ້າພະເຈົ້າກໍ່ບ່ໍ້ຢາກຮ໊ົ້ຟ້ັ້ນອະດ໊ີດຄືນມາອີກ.

-ມ໊ືອານ້ີ ພວກສູພາກັນໄປ ປ໊ືຮອບກາ, ກິນເຫ້ົ້ລ້ົ້ວເມ໊ົ້ ແລ້ວກໍ່ອາລະວາດຂ໊ຶ້ນ, ມ໊ືຄືນເຂ໊ົ້າມາຫ້ໍ້ານປ້ານສູ ແຕ່ພວກສູຈ໋ໍ້ຕ໊ີ

ເຂົາ ແລ້ວຍັງໄປມ້າງເພຶ່ກສະພາບ້ານອີກ. ແມ່ນຈັ່ງຊັ້ນບໍ?

-ບໍ່ເດ໊...ບໍ່ໄດ້ເປັນຄືເຈົ້າເວົ້າມາຫນິດນັ້ນດອກ! -ອິດຊາຈິ ສອດຂຶ້ນ, -ມີພວກຫມູ່ໄປບ້ານປີຮອບກາແທ້ ສ່ວນຂ້ອຍແທ້ໄປຢູ່ ບ້ານໄດ້ສາມມື້ແລ້ວ, ຍ້ອນວ່າ...ຄືເຈົ້າຮູ້ນັ້ນແລ້ວ, ພວກເຮົາບໍ່ໄດ້ ເມົາເຫລົ້າຈັກຄັ້. ມີຫນໍປານາດ ຄົນພວກເຂົາບ້ານກັບໂຊໂຮກາ ບ້ານທ່ວງຫລົ້ນນຳກັນ ໃນຕອນເຊົ້າ, ຂ້ອຍບໍ່ຕ້ອະດອກ, ໂຊໂຮກາ ມັນເມົາແຕ່ຈັກຫນ່ອຍແລ້ວ, ສ່ວນ ໂກໂລສບ້ານກະມີຫມູ່ຜູ້ຫນຶ່ງ ມາຊິ້ເຫລົ້າໃຫ້ມັນກິນ, ແຕ່ພວກເຮົາກໍຢູ່ກັນດີ໋ນີ້ແລ້ວ, ບໍ່ໄດ້ ຊອກເລື່ອງກ່ຳກອນຜູ້ໃດ, ມ່ວນກັນທຳມະດາຄືຜູ້ອື່ນໆ, ແຕ່ຕໍ່ມາມີ ຄົນຂະເຈົ້າຜູ້ຫນຶ່ງມາ, ຫນໍກາກເຊັນໂກບ້ານລະ ເຂົ້າມາ ແລ້ວ ຮ້ອງໃສ່ຂ້ອຍວ່າ: -ຍົກມື໊ຂຶ້ນ! ທັງເອົາປືນແຫນໃສ່ຂ້ອຍ, ໂຍ້ວ, ຂ້ອຍກະຕ່ອຍປາກມັນໂລດແຫລ້ວຈາກນັ້ນກໍເລີຍລົງມືກັນ, ພວກ ເຂົາຄົງຄ້ອນວ່າ ຜູ້ສາວມັກໄປກັບພວກເຮົາຫລາຍກ່ອນ...

-ລົງມືກັນແບບໃດ?

-ໂອ່...ບໍ່ມີຫຍັງຫລາຍດອກ, ຕີກັນຊ່ຶ່ງກ້າພວກເຂົາບໍ່ຍິງປືນ ຂຶ້ນ ກໍຄົງບໍ່ມີຫຍັງດອກ. ແຕ່ປານາດບ້ານຕີ ຍິງປືນຂຶ້ນ ຫນໍ ກາກ ເຊັນໂກ ກະຄືກັນ, ພວກເຮົາກໍເລີຍຫຸ້ມບຸກພວກເຂົາ, ບໍ່ຢາກຕີ ດອກພຽງແຕ່ວ່າຢາກຍຶດເອົາປືນຈາກມືພວກເຂົາທໍ່ນັ້ນລະ ແຕ່ພວກ ເຂົາອັດປະຕູຕັນໄວ້, ປຣິໂກດໂກ, ຄືເຈົ້າຮູ້ນັ້ນລະວ່າ ເຂົາເປັນຄົນ ຈັ່ງໃດ, ເຂົາກໍເລີຍທຸບປະຕູ...

-ເອົາລະ, ເອົາລະ! ພວກສູເຮັດຄັກຫລາຍ! ແລ້ວປືນຢູ່ໃສ ດຽວນີ້? ມີຈັກບອກ?

- ສອງ.

ອິດຊາຈີຫັນໄປຫາ ໂຊໂຮກາ.

- ມຶ່ງໄປເອົາມາໄປ໋.

ເຂົາເອົາປືນມາສົ່ງ ແລ້ວຂ້າພະເຈົ້າກໍບອກໃຫ້ພວກເດັກນ້ອຍກັບຄືນເມືອໂຮງຊ່າງໄມ້. ປະທານບ້ານຈົ່ມຫຍັງພຸມພໍາຢູ່ໃກ້ໆປືນວ່າ:

- ຊັ້ນບັດນີ້ຂ້ອຍເອົາປືນຄືນໄດ້ບໍ?

- ກະບໍ່ແຫລ້ວ! ລູກຊາຍເຈົ້າບໍ່ມີສິດຖືປືນ, ກາກເຊັ່ນໂກກະຄືກັນ, ຂ້ອຍບໍ່ມີສິດສົ່ງປືນຄືນໃຫ້ເຈົ້າດອກ.

- ໂອ້ຍຂ້ອຍບໍ່ໃຊ່ວ່າຢາກໄດ້ມັນຄືນດອກ, ເຈົ້າມ້ຽນມັນໄວ້ສາບາງເທື່ອ ເຈົ້າອາດຕ້ອງການໄວ້ໃຊ້ເວລາມີຂະໂມຍເຂົ້າມາໃນປ່າ. ສົ່ງທີ່ຂ້ອຍຕ້ອງການ...ແມ່ນຈັ່ງຊີ ຂໍຢ່າໃຫ້ເຈົ້າເອົາເລື່ອງເອົາລາວກັບເຫດການອັນນີ້ເລີຍ... ມັນແມ່ນເລື່ອງຂອງພວກຊາວຫນຸ່ມເຂົາຈ໋ຶ.

- ຫມາຍຄວາມວ່າ...ບໍ່ໃຫ້ຂ້ອຍຟ້ອງຮ້ອງຊັ້ນຫວະ?

- ກະຈັ່ງຊັ້ນແຫລ້ວ.

ຂ້າພະເຈົ້າຫົວຂໍ້ນ:

- ແລ້ວຂ້ອຍຊິເຮັດໄປເພື່ອຫຍັງລະ? ພວກເຮົາຄົນບ້ານໃກ້ເຮືອນຄຽງກັນ...

- ແມ່ນແລ້ວ, ແມ່ນແລ້ວ! - ພໍ່ເຖົ້າເວົ້າຂຶ້ນຫນ້າຕາເບີກບານ. - ຄົນບ້ານໃກ້ເຮືອນຄຽງກັນ... ມັນກໍມີເລື່ອງເລັກໆນ້ອຍໆ, ບໍ່ພໍທີ່ຈະລາຍງານຂຶ້ນຂັ້ນເທິງ.

ປະທານບ້ານຈາກໄປແລ້ວ, ຂ້າພະເຈົ້າຮູ້ສຶກວ່າສິ່ງຫນັກຫນ່ວງ ໃນຫົວໃຈຫລຸດຫລົ່ນໄປຫມົດ.

ເວົ້າແທ້ແລ້ວ, ອີກເທື່ອຫນຶ່ງ ຂ້າພະເຈົ້າຕ້ອງພະຍາຍາມປະ ຕິດປະຕໍ່ເອົາເລື່ອງນີ້ເຂົ້າໃສ່ກັບທິດຊີ້ນໍາວິຊາຄູ ຢ່າງລໍາບາກຍາກຊາ. ແຕ່ພວກເຮົາພໍໃຈນໍາການຫລຸບອັນຫນ້າພໍໃຈຂອງມັນຫລາຍ, ທັງ ຂ້າພະເຈົ້າທັງພວກເດັກນ້ອຍເລີຍ ລືມຫລັກການວິຊາຄູຈ້ອຍ. ຂ້າ ພະເຈົ້າບໍ່ໃສ່ໂທດພວກເຂົາ: ພວກເຂົາໃຫ້ຄໍາຫມັ້ນສັນຍາກັບຂ້າພະ ເຈົ້າວ່າຈະບໍ່ໄປບ້ານ ປີຣອບກາ ໂດຍບໍ່ມີອະນຸຍາດຈາກຂ້າພະເຈົ້າ ແລະຈະຜູກສໍາພັນອັນດີກັບຊາວຫນຸ່ມໃນບ້ານ ປີຣອບກາຄືນ.

ບົດທີ ๑๕

ຂອງພວກເຮົາຄັກກ່ວາ !

ມາຣອດລະດູຫນາວປີ ๑๙๔๔ ນິຄົມຂອງພວກເຮົາມີສະມາ ຊິກເປັນສາວນ້ອຍຢູ່ເກົ້າ ຫ ຄົນ. ໂອເລຍ ໂວໂຣໂນວາ ກໍາລັງ ເປັນສາວຈີ ປຽບດອກໄມ້ຈຸມພວມຈະບານ ນາງຈົບງາມສົມຄວນ ພວກເດັກນ້ອຍຜູ້ຊາຍເບິ່ງນາງດ້ວຍແສງຕາຊື່ນຊົມ ແຕ່ໂອເລຍປະ ພຶດຕົວຢ່າງຫນ້າຮັກເຮັດພໍດີພໍງາມກັບພວກເຂົາແຕ່ບໍ່ຍອມໃກ້ຊິດສະ ຫນິມກັບໃຜເລີຍ ນອກຈາກປູຣຸນຄົນດຽວ ທີ່ໄດ້ກາຍເປັນເພື່ອນສະ ຫນິດຂອງນາງ. ອີງໃສ່ການຄຸ້ມຄອງປົກປ້ອງຂອງອ້າຍບ່າວນ້ອຍ ເຈົ້າຊູ້ເຊັ່ນປູຣຸນ ເຊັ່ນນີ້ ໂອເລຍ ຈຶ່ງບໍ່ເກງກົວໃຜຈັກຄົນຢູ່ໃນນິຄົມ

ທ້ວງກ້າຮອດເມີນເສີຍຕໍ່ຄວາມຫລ້ຽໄຫລຂອງ ປຣິໂກດໂກ້ອ້ຽບ່າວ ນ້ອຍຜູ້ກ້ຶດກ້ຽ ແຕ່ໂງ່ຈ້ຽແລະອ່ອນແອກວ່າຫມູ່. ບູຮຸນເອງ ບໍ່ໄດ້ ນັກຮັກນ້ຽງແບບຊູ້ສ້ຽວດອກ ພວກເຂົ້ຽມ້ຽມ້ຶດຕະພ້ຽບອັນໄຮ້ດ້ຽງສ້ຽ ແບບຜູ້ເຍ້ຽໄວຕໍ່ກັນດ້ວຍຄວາມບໍລິສຸດແລະຈ້ຽງໃຈທ້ີ່ສຸດ. ສະພ້ຽວະ ການດ້ຽງກ່ຽວ ເຮ້ັດໃຫ້ພວກເຂົ້ຽທ້ັ້ງສອງມ້ຽຄຸນຄ່ຽສູງສ້ົ່ງ ຍ້ົ່ງໃຫຍ່ ຫລ້ຽຂ້ຶ້ນໃນສ້ຽຕ້ຽຂອງພວກຫມູ່ຄູ່. ນອກຈ້ຽກມ້ຶຄວ້ຽງ້ຽມເປ້ັນ ອ້ຽພ້ອນປະດ້ັບຕ້ຽວແລ້ວ ໂອ້ເລ້ຽກ໋ໍ່ບໍ່ມ້ຽຫ້ຍ້ັ້ງເດ້ັ່ນອ້ຽກ ນ້ຽງນ້ັ້ກວ້ຽກ ້ຽນກະສ້ຶກ໋ໍາຫລ້ຽ, ກ້ຽນອອກແຮ້ຽ້ຽນຫນ້ັ້ກ໗ຢູ່ກ້ຽ້ຽທ້ົ່ງເປ້ັນຄ້ຽ ສ້ຽ້ຽດ້ນຕ້ຽອ້ອນຈ້ອນຫນ້ຽ້ຽຫລ້ຽໄຫລສ໋ໍ້ລ້ັບນ້ຽ, ນ້ຽງນ້ັ້ກລະເມ້ຶ້ເພ້ັ້ ຝ້ັນວ່ຽ:

- ບ້ຽດໃຫຍ່ແລ້ວ ຂ້ອຍຊ້ຶເອ້ຽ້ຽຜ້ວຈ້ຽນ້ຽໂລດ!

ຫ້ວຫນ້ຽ້ຽກຸ່ມແມ່ຍ້ຽ ແມ່ນ ນ້ຽຈະເຈຍ ນ້ຶດແຊ້ບນ້ຽຢ້ຽ ນ້ຽງນ້ັ້ ກ້ຶກສ້ົ່ງນ້ຽຢ້ຽງນ້ຶ້ຶ້ມພ້ອມດ້ວຍເອກະສ້ຽນຕ້ຶດຕ້ຽມຕ້ັບໃຫຍ່, ໃນນ້ັ້ນ ມ້ຶລ້ຽ້ຽນຫລ້ຽຍ້ັນຫລ້ຽຍແນວກ່ຽວກ້ັບນ້ຽງເຊ້ັ່ນວ່ຽ: ເປ້ັນຂະ ໂມຍ, ຮ້ັບຊ້ຶ້ຽຍເຄ້ົ່ຽງລ້ັກ, ເຈ້ົ້ຽຂ້ຽ້ຽ້ຽ້ອສຸມພວກຫ້ຽກ໋ນ ໂລເລ, ດ້ຽງນ້ັ້ນ ເມ້ົ່ອພວກເຮ້ົ້ຽໄດ້ຮຸ້ນ້ຶດໃສ່ໃຈຄ້ໍຂ້ຽງນ້ຽແລ້ວ ເຫ້ັນ ວ່ານ້ຽເປ້ັນຄ້ນວ້ິເສດຜູ້້ຫ້ົ່ງ. ນ້ິໃສ່ຂ້ຽງນ້ຽຫນ້ຽ້ຽຄ້ຶບ ແລະເປ້ັນຜູ້້ ມ້ຶຄວ້ຽມຈ້ຽ້ຽໃຈທ້ີ່ສຸດ. ນ້ຽຈະເຈຍ ອ້ຽຍຸຍ້ັ້ງບ໋ໍ່ເຕ້ັ້ມ ໑໕ ປ້ຶ້ຽ໋ໍ ແຕ່ກ໋ໍ ຕ້ົ້ຽງເຕ້ັ້ມສ້ຶ້ດໃສ່ຕ້ຽ້ຽຈ້ຽກຄ້ນອ້ຶ້ນ໗. ໃບຫນ້ຽ້ຽຂ້ຽ້ຽ້ຽ້ນ້ຽ້ອນຜ່ອ້ຽ້ອ້ຽ ຊ້ຽ້ອ້ອດອ້ົ່ຽ້ຽທ້ະນ້ຽ້ຶ້ຕ້ວ ແລະມ້ຶຄວ້ຽມເດ້ັດດ່ຽ້ອເຂ້ັ້ມແຂ້ຽ້ຽຢູ່ໃນຕ້ວ, ນ້ຽ້ຽຮຸ້້ຈ້ັກຮ້ຽ້ຽຍ້ວ່ຽ້ຽພ້ວກຫ້ຽມ່ຢ້ຽ້ຽ້ຽ້ພ້ເຫ້ຽ້ຽ້ຽ້ະພ້ດ້ິ ໂດ້ຽ້ຽ້ບ໋ໍ່ຕ້ຽ້ຽ້ຽ້ໃຊ້ສ້ຽ້ຽ ແຮ້ຽ້ຽ້ຽ້ແບ້ຽ້ຽ້ໄຮ້ສ້ຽ້ຽ້ະ, ສ້ຽ້ຽ້ຽ້ມ້ຽ້ຽ້ໃຊ້ແສ້ຽ້ຽ້ຽ້ຕ້ຽ້ຽ້ອ້ຽ້ຽ້ອ້ກ້ຽ້ຽ້ຄ້ຳ້ຽ້ສ້ັ່ງ ພ້ວ້ຽ້ກ້ຽ້ເດ້ັ

ນ້ອຍຜູ້ຊາຍບໍ່ວ່າຜູ້ໃດ ທ້າສັ່ງສອນເຂົາຜູ້ນັ້ນດ້ວຍຄຳເວົ້າສັ້ນໆແຕ່ ຫນັກແຫນ້ນ:

- ເປັນຫຍັງ ໂຕຈຶ່ງບໍ່ເຂົ້າຈີ່ແລ້ວໂຍນ ກ້ຳຈັ່ງຊັ້ນ? ແມ່ນໂຕ ເປັນເສດກ້ຽວເຫົ້າຫລືວ່າຮ່ວນເອົາແບບຢ່າງຫມູຫມາມາ? ເກັບ ຄືນມາດ່ວນນີ້ໄວ..!

ນ້ຳສຽງຂອງນາງໃນເວລາເປ່ງວາຈາເຫລົ່ານີ້ລ້ຳເລິກ ຄ້າຍກັບ ວ່າເປັ່ງອອກມາຈາກປອດໂດຍກົງ. ສິ່ງດັ່ງກ່າວບົ່ງບອກພະລັງພາຍ ໃນຂອງນາງຢ່າງຈະແຈ້ງ.

ນາຊະເຈຍ ຜູກມິດກັບພວກເອື້ອຍຄູສອນ, ສຸມຈິດໃຈໃສ່ການ ອ່ານເກືອບທຸກຢ່າງ ແລະມຸ່ງຫນ້າສູ່ເສັ້ນທາງທີ່ນາງຫມາຍຫມັ້ນ ເອົາໄວ້ຢ່າງບໍ່ຄອນແຄນ ນັ້ນຄືມະຫາວິທະຍາໄລກຳມະກອນ. ແຕ່ ເປົ້າຫມາຍດັ່ງກ່າວນີ້ຍັງຢູ່ຫ່າງໄກສຸດຂອບຟ້າສຳລັບ ນາຊະເຈຍ ແລະຜູ້ອື່ນໆ ເຊິ່ງກໍຫລໍ້ລ້ຽງຄວາມໄຝ່ຝັນແບບດຽວກັນນີ້ເຊັ່ນ: ກາ ຣາບານິບ, ແວກຊະເນັບ, ຊາໂດຣອບ, ເວດກອບສະກີ. ແຕ່ ຊາວຫນຸ່ມປີກອ່ອນຂອງເຮົາຫມູ່ນີ້ ຍັງຫລ້າຫລັງຫລາຍ, ພວກ ເຂົາບໍ່ສາມາດນຳໃຊ້ກົດເກນຂອງວິຊາເລກ ແລະຄວາມຮູ້ພື້ນຖານ ທາງດ້ານການເມືອງກໍຍັງຕື້ນຫລາຍ. ຜູ້ທີ່ຮ່ວນມາຫລາຍກ່ວາຫມູ່ ແມ່ນ ຣາຍວິດຊາ ໂຊໂກໂລວາ, ຈັ່ງຊັ້ນພວກເຮົາຈຶ່ງສົ່ງນາງໄປຍັງ ມະຫາວິທະຍາໄລກຳມະກອນທີ່ເມືອງ ກີແຢັບ ໃນລະດູໃບໄມ້ຫລົ່ນ ປີ ໑໙໘໑.

ເວົ້າກັນຕາມຈິງແລ້ວ ພວກເຮົາຮູ້ຢູ່ເຕັມຫົວໃຈວ່າ ມັນເປັນ ການລົງທຶນທີ່ສ່ຽງໄພແທ້ໆ ແຕ່ພວກເອື້ອຍຄູຂອງພວກເຮົາປາກະ

ຫນາຢ່າງແຮງກ້າທີ່ຈະມີຕົວແທນຈາກນິຄົມໄປຢູ່ໃນມະຫາວິທະຍາ
ໄລກຳມະກອນ. ນັບວ່າເປັນເປົ້າຫມາຍສູງສົ່ງອັນຫນຶ່ງ ແຕ່ ຣາຍ
ອຶດຊາ ບໍ່ແມ່ນບຸກຄົນປະເພດທີ່ຈະຮັບປະກັນຜົນສຳເລັດຂອງພາລະ
ກິດທີ່ທຸກໆຄົນອຸທິດໃສ່ນີ້ເລີຍ. ນາງກະກຽມເພື່ອສອບເສັງຕະ
ຫລອດລະດູຮ້ອນ ແຕ່ເພິ່ນຕ້ອງໃຊ້ກຳລັງບັງຄັບໃຫ້ນາງນັ່ງລົງຕໍ່ຫນ້າ
ປຶ້ມ ເພາະວ່າ ຣາຍອຶດຊາ ບໍ່ມີຈິດໃຈຄຶດຫາການຮ່ຳຮຽນໃດໆເລີຍ.

ທ້າ ຊາໂດຣອບ ແວກຊະເນັບ ກາຣາບານິບ ແລະຜູ້ອື່ນໆ
ເຊື່ອຖ້ວນແຕ່ໃຝ່ຝັນຫາການສຶກສາຮ່ຳຮຽນ ພາກັນບໍ່ພໍໃຈ ເມື່ອ
ເຫັນວ່າ ຣາຍອຶດຊາ ເປັນຜູ້ໄດ້ຮັບເລືອກໄປຮຽນຢູ່ມະຫາວິທະຍາ
ໄລກຳມະກອນ. ແວກຊະເນັບຜູ້ມີພອນສະຫວັນໃນການອ່ານ ບໍ່ວ່າ
ໃນເວລາກາງເວັນຫລືກາງຄືນ ຫລືແມ່ນແຕ່ໃນຂະນະກຳລັງເປົ່າ
ເຫລັກແດງໆຢູ່ໂຮງຕີເຫລັກ, ຫມໍເປັນຜູ້ຮັກຄວາມຍຸດຕິທຳທີ່ສຸດ
ທ້າມັກສະແຫວງຄວາມຈິງ ແຕ່ຍາມໃດຫມໍນີ້ກໍມັກມີຄຳເວົ້າຫຍາບໆ
ຢູ່ໃນປາກ ເພື່ອທວາຍອະນາຄົດອັນໂຮງຮຸ່ງຂອງ ຣາຍອຶດຊາ ມັນ
ເວົ້າກັບຂ້າພະເຈົ້າແບບອຶງອະໆຕາມລັກສະນະຄົນປາກໜ້ຳວ່າ:

- ຈ... ເ... ຈົ້າ... ບ ບໍ່ ຫ... ເຫັນຫວະ? ຣາຍ... ອຶ ຊ...
ຊາ ຫັ້ນມີແຕ່ຊິໄປ ຢູ່ຄ... ຄຸກຫັ້ນແລ້ວ.

ສ່ວນກາຣາບານິບ ນັ້ນຍິ່ງເວົ້າຈະແຈ້ງໂລດວ່າ:

- ຂ້ອຍບໍ່ຄຶດຈັກຄົ້ວ່າພວກເຈົ້າຊິເຮັດແນວໂງ່ໆປານນີ້.

ແມ່ນແຕ່ ເມື່ອຢູ່ຕໍ່ຫນ້າ ຣາຍອຶດຊາ ເອງກໍຕາມ ຊາໂດຣອບ
ຍັງຍົ້ມແຍ້ມແບບເຍາะເຍີ້ຍ ໂບກມືຢ່າງມີຄວາມຫມາຍວ່າ "ບໍ່ມີ
ທາງ" ແລ້ວທັ້ງຄວາມເວົ້າແບບບໍ່ຢຳເກງຈັກຫນ້ອຍ ອອກມາວ່າ:

- ສ່ຳສາອັນນີ້ໄປ ມະຫາວິທະຍາໄລກຳມະກອນ ເອີ! ມັນກໍ ບໍ່ຕ່າງຫຍັງກັບຢາກແກ່ໄມ້ທ່ຽງປາຍນັ້ນແລ້ວ!

ຣາຍວິດຊາ ຍົ້ມຫົວຕໍ່ຄຳເວົ້າສຸດສີເຍາະເຍີ້ຍເຫລົ່ານີ້ດ້ວຍທ່າ ທ່ຽງເບີດໆ ເຖິງແມ່ນວ່ານ່ຽງເອງບໍ່ຢາກໄປຮຽນຢູ່ມະຫາວິທະຍາໄລ ກໍຕາມ ແຕ່ນ່ຽງກໍດີໃຈ ເພາະນ່ຽງພໍໃຈທີ່ຈະໄດ້ໄປ ກີແຍ້ບ.

ຂ້າພະເຈົ້າເອງມີຄວາມເຫັນຄືພວກເດັກນ້ອຍຜູ້ຊ່ຽຍນັ້ນແລ້ວ. ຣາຍວິດຊາ ຈະໄປເປັນນັກສຶກສາຢູ່ໃນມະຫາວິທະຍາໄລກຳມະກອນ ໄດ້ແບບໃດ? ເປັນທີ່ຮູ້ກັນດີວ່າ ໃນຂະນະທີ່ນ່ຽງກຳລັງຕິວເພື່ອສອບ ເສັ້ງນັ້ນ ນ່ຽງມັກໄດ້ຮັບເຈ້ຍນ້ອຍອັນເປັນຕາຫນ້າສົງໄສຫລາຍເທື່ອ ມາແຕ່ໃນເມືອງແລ້ວກໍຫາຍໂຕໄປຢ່າງເລິກລັບຫລາຍຄັ້ງ. ພ້ອມກັນ ນັ້ນ ນ່ຽງຍັງມີຜູ້ມາຍ້ຽມຢາມແບບລັບໆຢູ່ເປັນນິດ, ແຂກຂອງນ່ຽງ ຄືທ້າວ ກອກເນເຍັບ ອະດີດສະມາຊິກນິຄົມຄົນຫນຶ່ງເຊິ່ງມາຢູ່ນຳ ພວກເຮົາແຕ່ ນ ອາທິດພໍ່ພຽງແຕ່ເພື່ອລັກທຸກຢ່າງໃນນິຄົມຢ່າງສະ ບາຍອາລົມແລະຢ່າງເປັນລະບົບ ຈົນຮອດມື້ນັ້ນກຶ່ກຈັບຢູ່ໃນເມືອງ ຍ້ອນເລື່ອງລັກຄືເກົ່າ, ກຶ່ໄດ້ວ່ານັ້ນເປັນລູກຄ້າຜູ້ຊ່ຶ່ສັດຂອງກອງຕຳ ຫລວດຍຸດຕິທຳຄົນຫນຶ່ງ, ນັ້ນເປັນຄົນເສຍທ່າດຂ່າດຄຸນ, ຫນ້າ ລ້ຽງທ່ຽງທີ່ສຸດ, ເປັນຄົນຊະນິດຫາພົບຍາກຄົນຫນຶ່ງ ປະເພດວ່າພໍ ແຕ່ເຫັນຫນ້າ ຂ້າພະເຈົ້າກໍຮູ້ວ່ານັ້ນດັດສ້ຽງບໍ່ໄດ້.

ຣາຍວິດຊາ ສອບເສັ້ງເຂົ້າມະຫາວິທະຍາໄລໄດ້. ແຕ່ຫລັງ ຈາກໄດ້ຮັບຂ່າວດີອັນນັ້ ພຽງອາທິດດຽວ ພວກເຮົາໄດ້ຮູ້ຢ່າງບ້ຽ ເອີນວ່າ ທ້າວກອກເນເຍັບເອງ ກໍໄດ້ໄປກີແຍ້ບ ຄືກັນ.

- ບາດນີ້ແລ້ວ ສາວນັ້ນຊິໄດ້ຮຽນຄັກໆນ່າ! ຊາໂດຣອບເວົ້າຂຶ້ນ.

ລະດູຫນາວຜ່ານໄປ ຣາຍອິດຊາ ຂຽນຈົດຫມາຍມາເລື້ອຍ ແຕ່ເນື້ອໃນຈົດຫມາຍ ບໍ່ບອກໃຫ້ຮູ້ຫຍັງຫລາຍກ່ຽວກັບຊີວິດຂອງນາງ. ບາງຄັ້ງຊ້ຳຄືວ່າການຮຽນ ເຮັດໃຫ້ນາງຫຍຸ້ງຍາກຫລາຍ ແລະມັກຂາດເງິນໃຊ້ເລື້ອຍໆ ເຖິງວ່າ ນາງໄດ້ຮັບທຶນສຶກສາຢູ່ແລ້ວກໍຕາມ. ທຸກໆເດືອນໃດ ພວກເຮົາໄດ້ສົ່ງເງິນໄປໃຫ້ນາງປະມານ ๔๐ ຫາ ๕๐ ຣຸບ. ຊາໂດຣອບ ຢືນຢັນວ່າ ດ້ວຍເງິນຈຳນວນນີ້ ກອກເບ ເຢັບ ສາມາດ ຢູ່ທາງນອນຢູ່ນອນກິນສຳບາຍ, ຟັງເບິ່ງແລ້ວກໍຄື ແມ່ນຄວາມຫມໍ່ຢູ່. ພວກເອື້ອຍຄູຜູ້ກ່ຽວພັນກັບເລື່ອງນີ້ໂດຍສະເພາະ ໄດ້ຮັບການຕຳນິຕິຽນຈາກພວກນັກຮຽນ, ຈຶ່ງພວກເຂົານັກເວົ້າຄ່ຳຄ່ັ:

- ຜູ້ໃດກໍເຫັນວ່ານັ້ນແມ່ນເລື່ອງທີ່ບໍ່ຄວນເຮັດ ມີແຕ່ພວກເຈົ້າຫັ້ນລະ. ເປັນຫຍັງຈຶ່ງເປັນແບບນີ້ເນາະ? ພວກເຮົາເຫັນວ່າມັນເປັນໄປບໍ່ໄດ້, ພວກເຈົ້າຊ້ຳວ່າເປັນໄປໄດ້!

ໃນເດືອນມັງກອນ, ຣາຍອິດຊາ ກັບມາມິຄິມຢ່າງບໍ່ບອກລ່ວງຫນ້າ, ນາງມີກິ່ງເບ້ໃສ່ເຄື່ອງມາພ້ອມ ແລະບອກວ່າກັບມາ ເພື່ອພັກ. ແຕ່ວ່ານາງບໍ່ມີຫນັງສືອະນຸຍາດໃຫ້ພັກຈັກຢ່າງ, ເບິ່ງຕາມຮູບການພາຍນອກແລ້ວ ເປັນທີ່ເຂົ້າໃຈເອົາເອງ ນາງຈະບໍ່ກັບຄືນໄປກິແຢັບອີກ. ເມື່ອຂ້າພະເຈົ້າສົ່ງຄຳຖາມໄປຍັງມະຫາວິທະຍາໄລກຳມະກອນ ກໍໄດ້ຮັບຄຳຕອບວ່າ ຣາຍອິດຊາ ໂຊໂກໂລວາຢຸດໄປ

ຮຽນ ແລະອອກຈາກຫໍພັກນັກສຶກສາ ເພື່ອໄປຢູ່ບ່ອນອື່ນ ເຊິ່ງທາງ ມະຫາວິທະຍາໄລບໍ່ຮູ້ນຳແລ້ວ.

ບັດນີ້ທຸກຢ່າງຈະແຈ້ງແລ້ວ. ສົມຄວນໃຫ້ຄວາມຍຸດຕິທຳແກ່ ພວກເດັກນ້ອຍຜູ້ຊາຍແດ່. ພວກເຂົາບໍ່ເວົ້າຍອກເຍ້ຍ ຣາຍວິດຊາ ອີກ, ອິດທິນບໍ່ເວົ້າເຖິງປະສົບການແບບອັບໂຊກຂອງນາງ ແລະ ເຮັດຄືກັບວ່າພວກເຂົາລືມການຜະຈົນໄພອັນນີ້ແລ້ວ. ໃນຊຸມມື້ທຳ ອິດ ພວກເຂົາພາກັນຫົວຂວັນ ເອີກາເຕີຣີນາ ກຣິກໍເຮັບນາ ຢ່າງ ສຸດອົກສຸດໃຈ ເຊິ່ງເວລານັ້ນ ເຕັມໄປດ້ວຍຄວາມສັບສົນອຸກອັ່ງ, ແຕ່ເບິ່ງທົ່ວໄປແລ້ວ ພວກເຂົາເຂົ້າໃຈແລ້ວວ່າ ເຫດການນັ້ນເປັນ ເລື່ອງປົກກະຕິທີ່ສຸດ ເລື່ອງຫນຶ່ງ ແລະພວກເຂົາກໍຮູ້ຢູ່ກ່ອນແລ້ວ.

ຮອດເດືອນມີນາ, ນາງ ນາຕາເລຍ ມາກໂກນາ ອິດຊິບ ແຈ້ງຄວາມສົງໄສຂອງນາງຕໍ່ຂ້າພະເຈົ້າວ່າ ຣາຍວິດຊາ ສະແດງອາ ການບາງອັນທີ່ຊີ້ບອກວ່າກຳລັງຖືພາ.

ຂ້າພະເຈົ້າຮູ້ສຶກວ່າ ເລືອດໃນຕົວເຢັນກ້າມໄປຫມົດ. ນັກຮຽນ ຍິງຄົນຫນຶ່ງຂອງນິຄົມເດັກ ຖືພາ! ສະຖານະການສັບສົນຂຶ້ນແທ້ໆ. ຂ້າພະເຈົ້າຮູ້ສຶກດີວ່າ ມີຜູ້ຄົນປະເພດ "ເຄັ່ງສິນທຳ" ຈຳນວນ ຫລວງຫລາຍທີ່ຢູ່ອ້ອມຂ້າງອົງການຂອງພວກເຮົາ ເຊັ່ນຢູ່ໃນເມືອງ ແລະໃນກະຊວງສຶກສາປະຊາຊົນນັ້ນ ຈະບໍ່ພາດໂອກາດ ເພື່ອຮ້ອງ ໂຮສນຸງຫລ້ວ: "ມີການພົວພັນເພດຢ່າງໄຮ້ສິນທຳຢູ່ໃນນິຄົມ ເດັກ! ຜູ້ຊາຍກັບແມ່ຍິງຢູ່ຮ່ວມກັນ!" ຂ້າພະເຈົ້າຄິດຍ້ານທ້ວງກະໂຕ ສະພາບການທີ່ພວກເຮົາປະເຊີນຢູ່ໃນເວລານັ້ນ ແລະທ້ວງສະຖານະ ການອັນຫຍຸ້ງຍາກຂອງ ຣາຍວິດຊາກັບເອື້ອຍຄູທ້ວງຫລາຍເທົ່າໆກັນ.

ຂ້າພະເຈົ້າຂໍຮ້ອງນຳນາຕາເລຍ ອົດຊິບໃຫ້ໂອ້ລົມ "ແບບໄຂຫົວໃຈໃສ່ກັນ" ກັບ ຣາຍອົດຊາ.

ຣາຍອົດຊາ ປະຕິເສດຢ່າງເດັດດ່ຽວວ່ານາງບໍ່ໄດ້ກຶພາທັງນີ້ທ່າທາງຄຽດຂຶ້ນນຳ:

-ຂີ້ຕົວະ...ຂີ້ຕົວະທັງນັ້ນ! ແມ່ນໃຜກໍ່ເລື່ອງຂີ້ຄຽດແນວນີ້ຂຶ້ນມາ? ແລ້ວພວກເອື້ອຍຄູນີ້ມີຫນ້າທີ່ແຜ່ກະຈາຍຂ່າວເທັດມາແຕ່ນັ້ນເທິງ?

ຫນ້າດູຕົນ ນາຕາເລຍ ນາກໂກວນາ ແທ້ໆ, ນາງເອງກໍຮູ້ສຶກດີວ່າຕົນເຮັດບໍ່ຖືກປານໃດ. ຣາຍອົດຊາ ອ້ວນຂຶ້ນຫລາຍແທ້ ແລະ ອາການສັນຍານຫມາຍບອກການຖືພາຂອງນາງ ກໍມີແຕ່ຄວາມອຶນອງນເທົ່ານັ້ນ, ນອກຈາກນີ້ບໍ່ມີຂໍ້ພິສູດຄັກແນ່ອັນໃດອີກ. ພວກເຮົາພາກັນເຊື່ອ ຣາຍອົດຊາ.

ແຕ່ຕໍ່ມາອາທິດຫນຶ່ງ, ຊາໂດຣອບ ກໍເອີ້ນຂ້າພະເຈົ້າໄປໂອ້ລົມສອງຕໍ່ສອງຢູ່ກາງເດີ່ນ.

-ເຈົ້າຮູ້ບໍ່ວ່າ ຣາຍອົດຊາ ຖືພາ?

-ແລ້ວເຮັດໃຜມຶງຮູ້ລະ?

-ໂອ້ຍ ເຈົ້ານີ້ຕະຫລົກຫລາຍ! ເວົ້າແນວນີ້ ຫມາຍຄວາມວ່າເຈົ້າບໍ່ເຫັນແມ່ນບໍ່ວ່ານັ້ນມີລູກ? ເຂົາຮູ້ກັນຫມົດນິຄົມແລ້ວ. ຂ້ອຍຄິດວ່າເຈົ້າເອງກໍຄົງຮູ້ແລ້ວຊັ້ນດອກ.

-ເອົາລະ ສົມມຸດວ່ານັ້ນມີແທ້ ແລ້ວຊິເປັນແນວໃດລະ?

-ໂອ່...ກະບໍ່ມີຫຍັງດອກ, ວ່າແຕ່ວ່າເປັນຫຍັງມັນຈຶ່ງປິດບັງລະ ຄັນວ່ານັ້ນມີລູກ...ນັ້ນກະມີລູກ...ແຕ່ນັ້ນເຮັດຄືວ່າບໍ່ແມ່ນ. ນີ້ເດ້,

ຈົດໝາຍສະບັບໜຶ່ງຂອງໝໍ ກ້ອກເບເຍັບ. ອ່ານເບິ່ງແມ້...
"ເມຍທີ່ຮັກຂອງອ້າຍ...". ພວກເຮົາຮູ້ມາແຕ່ດົນແລ້ວລະ!

ພວກນາຍຄູຜູ້ຊາຍເອງກໍເລີ່ມວິຕົກກັງວົນຄືກັນ, ໃນທີ່ສຸດ ເລື່ອງນີ້ກໍເລີ່ມເຮັດໃຫ້ຂ້າພະເຈົ້າໃຈຮ້າຍ.

-ແລ້ວຊິພາກັນເດືອດຮ້ອນເຮັດຫຍັງລະ? ຄັນມັນມີລູກແທ້ ມັນກະຕ້ອງອອກ. ດອງນີ້ມັນປິດບັງໄດ້ ແຕ່ຕອນອອກມັນອຳບໍ່ໄດ້ ດອກ. ບໍ່ມີຫຍັງຫນ້າຢ້ານພິລຶກດອກ, ພວກເຮົາຊິມີແອ້ອຍຕື່ມ ຂຶ້ນຜູ້ໜຶ່ງເທົ່ານັ້ນແລ້ວ.

ຂ້າພະເຈົ້າໃຫ້ຄົນໄປເອີ້ນ ຣາຍອິດຊາ ມາຫາແລະຖາມວ່າ:

-ບອກມາຕາມຄວາມຈິງ ຣາຍອິດຊາ...ໂຕມີລູກຫວາ?

-ໂຍ້ວ! ເປັນຫຍັງຜູ້ໃດໆກໍຄືວ່າຈູ້ຈີ້ຫາເລື່ອງຂ້ອຍແທ້? ແມ່ນ ພວກເຈົ້າຄິດອອນຊອນແນວໃດ ຈັ່ງຊີ້ຊອນຕິດຕາມປານແມງວັນ ຕອມຫມາກນັ້ນ... ກືພາ! ມີລູກ! ຮຶ...ຂ້ອຍຂໍບອກອີກເທື່ອໜຶ່ງ ວ່າ ຂ້ອຍບໍ່ມີ.

ເວົ້າແລ້ວ ຣາຍອິດຊາ ກໍໃຫ້ສະອຶກສະອື້ນຂຶ້ນ.

-ຣາຍອິດຊາ, ເວົ້າດີໆ! ຂ້າພະເຈົ້າເວົ້າຂຶ້ນ, -ຖ້າວ່າໂຕມີ ແທ້, ກໍບໍ່ຈຳເປັນປິດບັງນ່າ. ພວກເຮົາຊິຊ່ອຍເຫລືອຫາວຽກຫາ ງານໃຫ້ເຮັດ, ຖ້າຈຳເປັນກໍເຮັດຢູ່ໃນນີ້ຄົນເລີຍ ແລ້ວຍັງຈະຊ່ອຍ ເລື່ອງເງິນເລື່ອງຄຳອີກ. ຕ້ອງກະກຽມແຕ່ລະບໍ ຊິອອກລູກອອກຕ້ຳ ທ້ຳຄົນນ້ຳ, ກະກຽມຜ້າອ້ອມ...

-ບໍ່ຕ້ອງ! ບໍ່ຕ້ອງມີຫຍັງຫມົດ! ຂ້ອຍບໍ່ຕ້ອງການວຽກງານ ໃດໆ...ເຊົາເວົ້າເທາະ!

-ເອ້! ເມືອໄດ້ລະ!

ຈັ່ງຊີ້ແລ້ວ ພວກເຮົາກໍເລີຍບໍ່ຮູ້ຫຍັງຫມົດ. ຄວາມຈົງຄວນສິ່ງ ມັນໄປກວດກັບແພດ, ແຕ່ມາຮອດບັນຫານີ້ ພວກຄູທ້າຫລາຍຊໍ້ ຄືດບໍ່ຄືກັນ ພວກຫນຶ່ງຈີ່ຈົ່ນໃຫ້ສະສາງບັນຫາຢ່າງໄວທີ່ສຸດ, ອີກ ພວກຫນຶ່ງເຫັນດີນໍາຂ້າພະເຈົ້າທີ່ຄຶດວ່າ ມັນເປັນການສືບສາວຫາວ ຄວາມຊະນິດທໍລະມານໃຈຢ່າງຫນຶ່ງ ທ້າຫນ້າອັບອາຍຂາຍຫນ້າສໍາ ລັບຍິງສາວອີກ, ຈັ່ງຊັ້ນ ການກວດດັ່ງກ່ອວຈົ່ງບໍ່ແມ່ນສິ່ງຈໍາເປັນ ເພາະວ່າເຖິງຢ່າງໃດ ຄວາມຈົງຍ່ອມປາກົດອອກມາເອງ ບໍ່ຊ້າກໍໄວ, ນອກນີ້ກໍ່ບໍ່ມີຫຍັງທີ່ຈະຕ້ອງຮີບຮ້ອນ, ກ້າຫາກວ່າ ຮາຍອິດຊາກໍ່ພາ ແທ້ ຢ່າງຫລາຍກໍຄົງແມ່ນ ๕ ເດືອນເທົ່ານັ້ນ, ຈັ່ງຊັ້ນປ່ອຍມັນຢູ່ ມຶດໆໄປກ່ອນໃຫ້ຊຶນເຄີຍກັບຄວາມຄຶດອັນນີ້ ແລ້ວໃນທີ່ສຸດມັນກໍ່ ອາດປົດບັງສະພາບອັນແທ້ຈົງຂອງຕົນເອງໄດ້.

ພວກເຮົາປ່ອຍ ຮາຍອິດຊາໄວ້ມຶດໆ.

ໃນວັນທີ ๑๕ ເມສາ ມີການໄຂກອງປະຊຸມໃຫຍ່ຄູສອນຢູ່ໂຮງ ລະຄອນໃນເມືອງ, ໃນໂອກາດນີ້ຂ້າພະເຈົ້າໄດ້ຂຶ້ນກ່າວລາຍງານວ່າ ດ້ວຍເລື່ອງ "ລະບຽບວິໄນ". ບົດລາຍງານຂອງຂ້າພະເຈົ້າສຸດລົງໃນ ຕອນແລງມື້ທໍາອິດນັ້ນໂລດ ແຕ່ເກີດມີການອະພິປາຍກົກກຽງກັນ ຢ່າງຟົດຟື້ນກ່ຽວກັບຂໍ້ວິນິດໄສຂອງຂ້າພະເຈົ້າຈັ່ງຊັ້ນເພິ່ນຈົ່ງຈັດໃຫ້ມີ ການອະພິປາຍໃນມື້ຕໍ່ໄປ. ຄູສອນເກືອບທຸກຄົນຈາກນິຄົມແລະພວກ ເດັກນ້ອຍຮຸ່ນໃຫຍ່ຈໍານວນຫນຶ່ງໄດ້ເຂົ້າຮ່ວມກອງປະຊຸມ, ພວກ ເຮົາພາກັນນອນຄ້າງຄືນຢູ່ໃນເມືອງ.

ເລີ່ມມີຄົນສົນໃຈໃນນິຄົມຂອງພວກເຮົາຫລາຍຂຶ້ນ, ແລະຄວາມ

ສິນໃຈອັນນີ້ກໍແຜ່ລາມອອກໄປກາຍຂອບເຂດເມືອງຈັ່ງຊັ້ນໃນນັ້ຕໍ່ມາ ຈຶ່ງມີຜູ້ຄົນຫລັ່ງໄຫລມາໂຮງລະຄອນຢ່າງຫລວງຫລາຍ. ໃນບັນຫາຕ່າງໆ ທີ່ເພິ່ນຖາມຂ້າພະເຈົ້ານັ້ນ ຍັງມີບັນຫາຫນຶ່ງກ່ຽວກັບການ "ສຶກສາຮ່ວມກັນ" ເຊິ່ງມາຮອດເວລານັ້ນ ຍັງເປັນເລື່ອງເກືອດຫ້າມຢູ່ສຳລັບນິຄົມເດັກຕິດໄພສັງຄົມ. ນິຄົມຂອງພວກເຮົາແມ່ນນິຄົມດຽວໃນສະຫະພາບໂຊວຽດ ທີ່ດຳເນີນການທົດລອງໃຊ້ວິທີການອັນນີ້.

ຂະນະທີ່ຕອບຄຳຖາມອັນນີ້ ຂ້າພະເຈົ້າໄດ້ຄຶດເຖິງເລື່ອງ ຣາຍ ອິດຊາຂຶ້ນມາແວບຫນຶ່ງ ແຕ່ຂ້າພະເຈົ້າກໍຄຶດວ່າມັນກືພາແທ້ໆຫລືບໍ່ກືພາ, ໃນສາຍຕາຂອງຂ້າພະເຈົ້າແລ້ວ ມັນບໍ່ເປັນບັນຫາສຳລັບການສຶກສາຮ່ວມກັນເລີຍ. ຂ້າພະເຈົ້າຈຶ່ງປະກາດຕໍ່ກອງປະຊຸມວ່າກ່ຽວກັບເລື່ອງນີ້ແລ້ວ ຢູ່ໃນນິຄົມຂອງພວກເຮົາທຸກສິ່ງທຸກຢ່າງດຳເນີນໄປໂດຍດີທີ່ສຸດ.

ໃນລະຫວ່າງຢຸດພັກຜ່ອນເທື່ອຫນຶ່ງ, ນິຄົມມາເອີ້ນຂ້າພະເຈົ້າໄປທີ່ລະບຽງ. ຂ້າພະເຈົ້າຕຳກັບ ບຣາເຊັນໂກ ເຊິ່ງເຊົ່າຫອບຢູ່: ມັນຫ້ຳ ມາສຸດຢ່ຽດຈົນຮອດໃນເມືອງ ແລະບໍ່ຍອມບອກເຫດຜົນທີ່ພາໃຫ້ມັນມາ ແກ່ຄູສອນຜູ້ໃດຜູ້ຫນຶ່ງເລີຍ.

- ອານໂຕນ ເຊມີໂນວິດ! ເກີດເລື່ອງຮ້າຍຢູ່ນິຄົມເຮົາ...ພວກເຮົາພໍ້ເດັກນ້ອຍຕາຍຢູ່ໃນຫ້ຳພັກພວກແມ່ຍິງ.

- ເດັກນ້ອຍຕາຍຊັ້ນຫວະ?!

- ເອີ...ຕາຍແຈບນັບທີ່ສຸດເລີຍລະ. ຢູ່ໃນກະຕ່າຂອງຣາຍອິດຊາ. ເລັນກາ ລ້ຽງພົ້ນເຮືອນຢູ່ເລີຍສ່ອງເບິ່ງກະຕ່າເຄື່ອງຢ່າງບ້ຽ

ເອີນ. ຫລິ ລາງເທົ່ອຊິຫລອຍເອົາເຄື່ອງອັນໃດອັນຫນຶ່ງບໍ່ຈັກເດ້, ຊັ້ນມັນເລີຍເຫັນເດັກນ້ອຍຕາຍ.

- ແມ່ນນ໋ງເວົ້າຮອດເລື່ອງຫຍັງເກາະ?

ຄວາມຮູ້ສຶກຂອງພວກເຮົາສັບສົນຈົນບອກບໍ່ຖືກ. ຜ່ານມາຂ້າພະເຈົ້າຍັງບໍ່ເຄີຍພົບກັບສະພາບອະຫນາດຢ່າງນີ້ເລີຍ. ພວກເອ໊ອຍຄູພາກັນຫນ້າເນົ້ນຕາຕາຍສັ່ນເຊັນອອກຈາກໂຮງລະຄອນ ຢ່າງບໍ່ເປັນລະບຽບ ແລະວ່າຈ້າງລິດ້ຳຄັນຫນຶ່ງ ເພື່ອສົ່ງຮອດນິຄົມ. ຂ້າພະເຈົ້າບໍ່ສາມາດໄປນຳພວກເຂົາເພາະຕ້ອງຂຶ້ນຕອບໂຕ້ຂໍ້ໂຈມຕີບິດລາຍງານອີກ.

- ແລ້ວ ສົບເດັກນ້ອຍຢູ່ໃສດຽວນີ້? - ຂ້າພະເຈົ້າຖາມ ອານໂຕນ ບຣາເຊັນໂກ.

- ອ໋ານ ອ໋ວາໂນ໋ດ ເອົາມ໋ງນໄວ້ໃນຫ໋ພັກ. ມັນຢູ່ຫັ້ນລະ.

- ແລ້ວ ຣາຍ໋ດຊາ ເດ້?

- ຣາຍ໋ດຊາ ຢູ່ຫ້ອງການ, ພວກຜູ້ຊາຍເຝົ້າມັນໄວ້.

ຂ້າພະເຈົ້າສົ່ງ ອານໂຕນໄປແຈ້ງຕຳຫລວດກ່ຽວກັບການພົບສົບແລ້ວຢູ່ຕໍ່ເພື່ອດຳເນີນການອະພິປາຍກ່ຽວກັບລະບຽບວິໄນ.

ຕອນແລງ ຂ້າພະເຈົ້າຈົ່ງກັບຄືນມາເກ໋ງນິຄົມ. ຣາຍ໋ດຊາ ນ໋ງຢູ່ເທ໋ງຕັ່ງໄມ້ຫນ່ວຍຍາວຢູ່ໃນຫ້ອງການຂອງຂ້າພະເຈົ້າ, ປ່ອຍຜົມຍາຍຊະ ແລະມີຜ້າກັນເປ໊ອນທີ່ໃຊ້ເວລາໄປເຮັດວຽກຢູ່ບ່ອນຊັກເຄື່ອງຄາຄ໋ງຢູ່. ເມື່ອຂ້າພະເຈົ້າກ້າວເຂົ້າໃນຫ້ອງ ມັນຮອດບໍ່ຫລຽວມາເບິ່ງແຕ່ກົ້ມຫົວຕ່ຳລົງອີກ. ຢູ່ເທ໋ງຕັ່ງຍາວຫນ່ວຍດຽວກັນນີ້ ຍັງມີແວກຊະເນັບອີກຜູ້ຫນຶ່ງ, ຫມໍຢູ່ທ່ານກາງກອງປ໊ົ້ມ, ກຳລັງປຶກປ໊ົ້ມ

ຫ້ອນັ້ນຫ້ອນີ້ຊອກຫາຂໍ້ອ້າງອີງອັນໃດອັນຫນຶ່ງຢູ່ ເພາະຫມໍຍິບປົ້ມ ແຕ່ລະຫ້ອຂຶ້ນມາປຶດວັບໆໂດຍບໍ່ສົນໃຈນຳຜູ້ໃດຫມົດ.

ຂ້າພະເຈົ້າສັ່ງໃຫ້ໄຂກຸນແຈປະຕູຫໍພັກ ແລ້ວຍ້າຍກະຕ່າໃສ່ສົບເດັກນ້ອຍໄປໄວ້ໃນຫ້ອງແກ້ວມ້ຽນຜ້າ. ໃນຕອນເດິກ, ເມື່ອທຸກຄົນກັບໄປນອນແລ້ວ ຂ້າພະເຈົ້າ ຈຶ່ງຖາມ ຣາຍອິດຊາວ່າ:

- ເປັນຫຍັງໂຕຈຶ່ງເຮັດແນວນີ້?

ຣາຍອິດຊາເງີຍຫນ້າຂຶ້ນເບິ່ງຂ້າພະເຈົ້າ, ແສງຕາຄ້າຍຄືສັດເດຍລະສານ, ມັນແປງຜ້າກັນເປື້ອນຢູ່ເທິງຫ້ອເຂົ່າໄປມາແລ້ວຈຶ່ງຕອບວ່າ:

- ຂ້ອຍເຮັດໄປແລ້ວ...ມື້ທັ້ນນະ.

- ເປັນຫຍັງຈຶ່ງບໍ່ຟັງຄວາມກັນແດ່?

ໃນທັນທີທັນໃດນັ້ນ ມັນກໍໃຫ້ສະອຶ້ນຄ່ອຍໆ.

- ຂ້ອຍເອງກໍບໍ່ຮູ້.

ຂ້າພະເຈົ້າປ່ອຍໃຫ້ ຣາຍອິດຊາ ນອນຢູ່ໃນຫ້ອງການ ພາຍໃຕ້ການດູແລຂອງ ແວກຊະເນັບເຊິ່ງມີວເມົ້າຢູ່ນຳການອ່ານປົ້ມຈົນຂ້າພະເຈົ້າເຊື່ອຫມັ້ນວ່າ ມັນຈະມີສະຕິຕື່ນຕົວຢູ່ຕະຫລອດເວລາ. ພວກເຮົາທຸກຄົນພາກັນຄຶດຢ້ານວ່າ ຣາຍອິດຊາ ອາດຄຶດສັ້ນທຳລາຍຊີວິດຕົນເອງ.

ເຊົ້າມື້ຕໍ່ມາ ໄອຍະການຈຶ່ງມາຮອດ, ການສືບສວນບໍ່ໃຊ້ເວລາດົນເທົ່າໃດ ເພາະບໍ່ມີຄົນໃຫ້ສືບປາກຄຳພໍເທົ່າໃດຄົນ. ຣາຍອິດຊາເລົ່າເລື່ອງຄາຕະກຳຂອງມັນແບບຂີ້ຄ້ຳຄ້ຳເວົ້າ ແຕ່ຄຳເວົ້າແຕ່ລະຄຳຄັກແນ່. ໃນຕອນກາງຄືນ ມັນອອກລູກຢູ່ໃນກະໂຕຫໍພັກແມ່ຍິງ ເຊິ່ງ

ພວກຫມູ່ອີກ ๕ ຄົນກໍາລັງນອນຢູ່. ບໍ່ມີໃຜຈັກຄົນຮູ້ເມື່ອ. ຣາຍ
ອິດຊາ ອະທິບາຍຄືກັບວ່າມັນແມ່ນເຫດການທໍາມະດາຢ່າງຫນຶ່ງ:

-ຂ້ອຍພະຍາຍາມບໍ່ຮ້ອງບໍ່ຄາງ.

ໃນທັນທີ ທີ່ອອກລູກມ້ົມທ້ອງມັນກໍເອົາຜ້າອຸບປາກເດັກນ້ອຍ
ໂລດ. ມັນປະຕິເສດວ່າບໍ່ໄດ້ຄຶດແນວນີ້ໄວ້ກ່ອນ:

-ຂ້ອຍບໍ່ຢາກເຮັດຈັ່ງຊັ້ນດອກ ແຕ່ມັນຮ້ອງຂຶ້ນ.

ມັນເອົາເດັກຕາຍເຊື່ອງໄວ້ໃນກະຕ່າ ເຊິ່ງມັນໃຊ້ລະຫວ່າງໄປ
ຮຽນຢູ່ມະຫາວິທະຍາໄລກໍາມະກອນແລະກະໄວ້ວ່າ ຈະເອົາໄປຖິ້ມໃນ
ຄືນຕໍ່ໄປ. ມັນຄຶດວ່າ ຫມາຈອກຄົງຈະມາແທ້ນກິນລາກສົບຈົນ
ກ້ົງ ຈັ່ງຊັ້ນກໍຈະບໍ່ມີໃຜຮູ້ເລື່ອງທີ່ເກີດຂຶ້ນນີ້ເລີຍ. ມ້ົເຊົ້າ ມັນອອກ
ໄປເຮັດວຽກຢູ່ໂຮງຈັກລີດ ບ່ອນທີ່ພວກນັກຮຽນແມ່ຍິງພາກັນເອົາ
ຜ້າປູບ່ອນປອກຫມອນຂອງຕົນໄປຊັກ. ຮອດເວລາກິນເຂົ້າເຊົ້າ
ແລະເຂົ້າສວາຍ ມັນກໍກິນຮ່ວມກັບຫມູ່ນັກຮຽນທຸກຄົນ ຄືກັບວ່າບໍ່
ມີເຫດການອັນໃດເກີດຂຶ້ນ ນອກຈາກວ່າ ມັນມີທ່າ "ງຽບເຫງົາ"
ແດ່, ຕາມຄໍາເວົ້າຂອງພວກເດັກນ້ອຍຜູ້ຊາຍ.

ໄອຍະການ ເອົາ ຣາຍອິດຊາ ໄປພ້ອມກັບລາວ ແລະຂຶ້ນ
ຫນ້ົງສືສົ່ງສົບເດັກນ້ອຍໄປຍັງໂຮງເຢັນຂອງໂຮງຫມໍແຫ່ງຫນຶ່ງ ເພື່ອ
ຮັບການຜ່າຕັດພິສູດ.

ພວກຄູສອນພາກັນຫມົດກໍາລັງໃຈ ຍ້ອນເຫດການອັນນ້ີເປັນ
ທີ່ສຸດ. ພວກເຂົາຄຶດວ່າ ບັດນ້ີອະວະສານຂອງນິຄົມຫຍັບໃກ້ເຂົ້າມາ
ແລ້ວ.

ຢູ່ໃນກຸ່ມນັກຮຽນນັ້ນຈໍ້າເກີດມີຄວາມຄຶກຄະນອງແບບຫນຶ່ງ.

ພວກແມ່ຍິງຢ້ານຄວາມມືດ ແລະບໍ່ກ້າເຂົ້າໄປຮອດຫໍພັກຄົນເອງ, ພວກເຂົາບໍ່ຍອມເຂົ້າໄປຢູ່ໃນຕອນກາງຄືນ ຖ້າບໍ່ໄດ້ພວກຜູ້ຊາຍຢູ່ເປັນຫມູ່. ຊາໂດຣອບ ກັບ ກາຣາບານີບ ຈຶ່ງຈົນວນຢູ່ໃນຫໍພັກແມ່ຍິງຫລາຍຄືນ. ຜົນປາກົດວ່າທັງພວກແມ່ຍິງທັງພວກຜູ້ຊາຍ ບໍ່ໄດ້ຫລັບໄດ້ນອນ ແລະບໍ່ປ່ຽນຮອດເຄື່ອງນຸ່ງ. ບາງເວລາພວກເດັກນ້ອຍຜູ້ຊາຍນັ້ນກໍເຮັດຫລອກແມ່ຍິງ: ພວກເຂົາໃຊ້ຜ້າປູບ່ອນປົກຫົວແລ້ວຄ່ອຍໆໂປໂລຂຶ້ນທາງປ່ອງຢ້ຽມ, ເຮັດສຽງເຫົ່າຫອນແບບເປັນຕາຂົນລຸກ ຢູ່ໃນປ່ອງສົ່ງຄ້ອນ, ລັກລອດເຂົ້າໄປຢູ່ກ້ອງຕຽງຣາຍອິດຊາ, ພໍຕົກກາງຄືນກໍຮ້ອງໃຫ້ເຮັດສຽງຄືເດັກນ້ອຍເກີດໃຫມ່. ສ່ວນຄວາມຮູ້ສຶກຕໍ່ການຄາດຕະກໍາເດັກນັ້ນ ພວກເຂົາຈໍ້າເຫັນວ່າເປັນເລື່ອງທໍາມະດາ ນອກນັ້ຍັງຂັດກັບພວກຄູສອນອີກສໍາລັບສາເຫດຂອງການຄາດຕະກໍາ. ພວກເອົ້ຍຄູຄຶດວ່າ ຣາຍອິດຊາເອົາຜ້າອຸດປາກເດັກນ້ອຍ ຍ້ອນຄວາມອັບອາຍຕາມປະສາສາວນ້ອຍໄວອ່ອນທີ່ຕົກຢູ່ໃນສະພາວະເສັ້ນປະສາດເຄັ່ງຕຶງ, ທ່າມກາງຄວາມສະຫງົບງຽບຂອງຫໍພັກ ໃນຂະນະທີ່ພວກຫມູ່ອີກ ๕ ຄົນກໍາລັງນອນຫລັບຈົມປົ້ງ, ລູກເກີດໃຫມ່ຈໍ້າຊິຮ້ອງຈ໊ອກຂຶ້ນ ຈັ່ງຊັ້ນຍ້ອນຢ້ານຫມູ່ຕື່ນຂຶ້ນມາເຫັນກໍຈໍາຕ້ອງເຮັດແນວນີ້.

ຊາໂດຣອບ ຫົວຈົນເຈັບໂຄງກະດູກເມື່ອໄດ້ຍິນຄໍາອະທິບາຍດັ່ງກ່າວຈາກປາກຂອງນັກສຶກສາສາດ ຜູ້ຊ່ຽວຊານ ຝ່າຍຈິດຕະວິທະຍາ, ມັນເວົ້າວ່າ:

- ໂອ້ຍ ປານໃດພວກເຈົ້າຊິເຊົາເວົ້າເລື່ອງນີ້? ຄວາມອັບອາຍຂອງສາວນ້ອຍໄວອ່ອນວ່າຕີ? ມັນກະກຽມທຸກຢ່າງໄວ້ພໍແຮງ

ແລ້ວນ່າ ຍ້ອນແນວນີ້ຕ່ວາ ມັນຈົ່ງບໍ່ຍອມຮັບຈັກເທື່ອວ່າມີລູກ ໃກ້ຊິອອກຢູ່ແລ້ວ ມັນກັບຫນໍ້ກ້ອກແນເຍັບ ປົກສາຫາລືກັນຮ່ວມ ຮ້ອຍແລ້ວນ່າ! ແລ້ວກະຕ່າທີ່ມັນຄຶດວ່າ ຊິເອົາໄປໂຍນຖິ້ມໃນປ່າ ຫັ້ນເດ້? ຄັນວ່າມັນເຮັດໄປຍ້ອນຄວາມອາຍແທ້ໆ ມັນຊິມີຫນ້າກ້າ ໄປເຮັດວຽກຢູ່ໂຮງຊັກຜ້າເສີຍຈັ່ງຊັ້ນຫວະໃນມື້ເຊົ້າຕໍ່ມານໍ້ະ ຄັນວ່າ ແມ່ນເຮົາເປັນຜູ້ຕັດສິນໃຈ໋, ເຮັດຊໍ່ສຸດຍອດເລີຍ ແລ້ວມັນກະຊິຊໍ່ ຈັ່ງຊິຕະຫລອດໄປ. ແລ້ວພວກເຈົ້າຄຶດວ່າແມ່ນຄວາມອັບອາຍຂອງ ສາວນ້ອຍ ເຮ! ມັນບໍ່ເຄີຍມີຄວາມຮູ້ສຶກອັນນີ້ຈັກເທື່ອດອກໃນຊີວິດ ຂອງມັນນໍ້ະ!

-ຄັນເປັນຈັ່ງຊັ້ນ ມັນຂ້າລູກເຮັດຫຍັງ? ເພື່ອເປົ້າຫມາຍອັນ ໃດ? ພວກຄູສອນຕັ້ງຄໍາຖາມແບບຄົນຫມົດຫວັງ.

-ໂອ້ຍງ່າຍຊິຕາຍ, ເປົ້າຫມາຍຂອງມັນຊິມີຫຍັງ! ມັນຊິຢາກ ໄດ້ລູກໄປເຮັດຫຍັງ? ຕ້ອງໄດ້ລ້ຽງໄດ້ເບິ່ງເດ້ ແລ້ວກະຫມົດທຸກສິ່ງ ທຸກຢ່າງອີກ. ພວກເຂົາຫັ້ນຫວະຊິຢາກໄດ້ລູກ ໂດຍສະເພາະຫນໍ ້ກ້ອກແນເຍັບຫັ້ນ.

-ໂອ້! ເປັນໄປບໍ່ໄດ້ດອກແບບນີ້ນໍ້ະ!...

-ເປັນໄປບໍ່ໄດ້ຊັ້ນຫວະ? ຈັ່ງແມ່ນເປັນຕາຢາກຫ້ອ...ເປັນທໍາ ມະດາວ່າ ຣາຍອິດຊາ ມັນບໍ່ເວົ້າແນວນີ້ອອກມາດອກ ແຕ່ຂ້ອຍເຊື່ອ ແນ່ວ່າ ຖ້າເພິ່ນສໍ້ມັນຖືກແບບຖືກທາງມັນຊິເປີດເຜີຍອອກມາ ຄັກໆ..

ພວກເດັກນ້ອຍຜູ້ຊາຍເຫັນພ້ອງກັບ ຊາໂດຣອບ ໂດຍບໍ່ມີ ຄວາມສົງໄສແມ່ນແຕ່ຫນ້ອຍດຽວ. ການາບານິບັ້ນ ຢືນຢັນວ່າ

ເທື່ອນີ້ ບໍ່ແມ່ນເທື່ອທຳອິດທີ່ ຣາຍອິດຊາ "ເສຍທ່າ" ມາ ແລະ ມັນກໍເຄີຍເປັນຢ່ານໃດຢ່ານຫນຶ່ງມາແລ້ວກ່ອນຈະມາຢູ່ນິຄົມນີ້.

ສາມວັນຫລັງຈາກອຸບັດເຫດ, ການາບານິບ ກໍນຳເອົາຊາກສົບເດັກນ້ອຍໄປສົ່ງໃຫ້ໂຮງເຢັນ, ຕອນກັບມາມັນມີທ່າທີເບີກບານແຈ່ມໃສດີ.

- ໂອ້ຍ...ພິລຶກແທ້ໆໃດ໋ ອັນເຮົາເຫັນມາຫັ້ນນ໊ະ! ຈັ່ງແມ່ນຫລາຍແບບຫລາຍແນວ... ເພິ່ນດອງເດັກນ້ອຍໃສ່ໃນແກ້ວໃຫຍ່ໄວ້...ມີເປັນ ມ໋ວ ພຸ້ນລະ. ບາງຄົນກໍບໍ່ເປັນເບິ່ງເລີຍເວ້ີ, ເປັນຫນ້າຢ້ານກະມີ ຂາງໍຂາຂິດໂອ້ຍເບິ່ງເກືອບບໍ່ອອກວ່າແມ່ນຄົນຫລືແມ່ນນິກັນແທ້! ຂອງພວກເຮົາ ຄັກກວ່າຫມຸ! ມັນງາມກ່ວາຫມູໃດ໋!

ເອົາເຕີຣົນາ ກຣີກໍເຮັບນາ ແກ່ວ່າຫົວຊິ່ງຢາກຕຳຫນີແຕ່ກໍອິດຫົວບໍ່ໄດ້.

- ແມ່ນເຈົ້າເອົາຫຍັງມາເວົ້າເກາະ ເຊມີຍາ! ເຈົ້າບໍ່ກະດຽມປາກແດ່ຫວະ!

ພວກເດັກນ້ອຍຜູ້ຊາຍຫົວລ້ົນລ້ົນ, ພວກເຂົາເບ້ືອຫນ່າຍສີຫນ້າກ໋ືສົນ ແລະໃບຫນ້າຄ໋ືໄປສົ່ງສະການຜີຕາຍຂອງພວກຄູສອນພໍແຮງແລ້ວ.

ສາມເດືອນຕໍ່ມາ ເພິ່ນຕັດສິນຄະດີຂອງ ຣາຍອິດຊາ. ສະມາຊິກສະພາສຶກສາຂອງນິຄົມທັງຫມົດກ໋ືກເຊີນໄປເປັນພະຍານ. ຫລັກຈິດຕະວິທະຍາ ແລະທິດສະດີວ່າດ້ວຍຄວາມອັບອາຍຂອງສາວ້ອຍເປັນຝ່າຍມີໄຊ ເຫນືອຈິດໃຈພະນັກງານຢູ່ໃນສານ, ຈ່ຳສານຕຳຫນິ

ຕິດນພວກເຮົາທີ່ບໍ່ເຊອບສອນໃຫ້ຣາຍອິດຊາ ມີຈິດສຳນຶກອັນດີງາມ. ແນ່ນອນວ່າ ພວກເຮົາບໍ່ມີທາງຄັດຄ້ານໄດ້. ເພິ່ນເຊີນຂ້າພະເຈົ້າເຂົ້າໄປພົບໃນຫ້ອງປະຊຸມແລ້ວກ່າວວ່າ:

-ຮັບເອົາມັນກັບໄປຢູ່ນິຄົມອີກໄດ້ບໍ?

-ໄດ້ຢູ່.

ຣາຍອິດຊາ ໄດ້ຮັບໂທດ ແບບຄວບຄຸມຕົວຢູ່ນອກຄຸກ ຊ ປີ, ໂດຍມອບຫນ້າທີ່ດູແລມັນໃຫ້ແກ່ຄະນະອຳນວຍການນິຄົມຂອງພວກເຮົາ.

ມັນກັບຄືນມາຢູ່ກັບພວກເຮົາຄືວ່າບໍ່ເຄີຍມີເລື່ອງຫຍັງເກີດຂຶ້ນ, ແຈ່ມໃສດີງາມຢູ່ໃນເກີບໂບກຫນັງສີນ້ຳຕານເຫລື້ອມຜົງໆ, ສາມາດປິ່ນຕົວເຕັ້ນລຳ ໃນຈັງຫວະອ່ອນຊ້ອນເວລາມີບຸນການຄືນຢ່າງອ່ອນຊ້ອຍ ສົ່ງດັ່ງກ່າວ ເຮັດໃຫ້ພວກນັກຮ້ອງແມ່ຍິງກັບພວກສາວຊັກຜ້າມາແຕ່ ປີຣອບກາ ອິດສາຢ່າງເຫັນໄດ້ຄັກ.

ນາຊະເຈຍ ນິດແຊນນາຢາ ເວົ້າກັບຂ້າພະເຈົ້າວ່າ:

-ເຈົ້າສົ່ງ ຣາຍອິດຊາ ຫນີຈາກນິຄົມເອງຄືຊິ ຫລືບໍ່ກໍປ່ອຍໃຫ້ພວກເຮົາລົງມືເອງ, ພວກເຮົາຮູ້ສຶກອະເຫຍື່ອງໂພດທີ່ຕ້ອງນອນຮ່ວມຫ້ອງກັບມັນ.

ຂ້າພະເຈົ້າພ້າວໄປຊອກບ່ອນເຮັດວຽກໃຫ້ມັນ ແລະໄດ້ບ່ອນເຮັດວຽກຢູ່ໃນໂຮງງານຫັກແສ່ວບ່ອນຫນຶ່ງ.

ຂ້າພະເຈົ້າພົບກັບມັນຫລາຍເທື່ອ ຢູ່ໃນເມືອງ. ໃນປີ ຄ.ສ ຊ, ເມື່ອເຂົ້າມາເພື່ອກິດທຸລະນັ້ນ ຂ້າພະເຈົ້າເຫັນ ຣາຍອິດຊາ ກຳລັງຍົກຈານອາຫານຢູ່ຮ້ານອາຫານເບົາບ່ອນຫນຶ່ງ, ຂ້າພະເຈົ້າຈຶ່ງໄດ້

ທັນທີ: ມັນຕຸ້ຍພີຂຶ້ນ ແລະເບິ່ງຊ້າແຂງແຮງຫ້າວຫັນດີກ່ວາແຕ່ເກົ່າຫລາຍ.

-ເປັນແນວໃດ ສະບາຍດີຢູ່ເບາະ?

-ດີຫລາຍ, ຂ້ອຍເປັນຄົນຍົກອາຫານ, ມີລູກສອງຄົນແລະຜົວດີຄົນຫນຶ່ງ.

-ກ້ອກເນເຍັບ ຫັ້ນຫວະ?

-ໂອ່...ບໍ່ດອກ. ມັນຫົວ, -ເລື່ອງນັ້ນເປັນອະດີດ ແລະຂ້ອຍກໍລືມມັນໄປແລ້ວ, ມັນຖືກແທງຕາຍຢູ່ກາງຖະຫນົນ...ດົນແລ້ວລະ, ອາບໂຕນ ເຊມືອໂນວິດ. ເຈົ້າຮູ້ບໍ່ວ່າ...

-ຮູ້ຫຍັງລະ?

-ຂ້ອຍຢາກຂອບໃຈເຈົ້າຫລາຍໆ ທີ່ບໍ່ປ່ອຍໃຫ້ຂ້ອຍຈົມດິ່ງຢູ່ໃນຄວາມຊື່ອ. ນັບແຕ່ໄດ້ມາເຮັດວຽກຢູ່ໂຮງຊ່າງ ຂ້ອຍກໍຊຸດຫລຸມຝັງອະດີດເລີຍ.

ບົດທີ ๑๗

ແທງເອ້ເລ້

ຕົກມາຮອດລະດູບານໃຫມ່ ເຄາະກຳອັນໃຫມ່ກໍທັບຖົມມາໃສ່ພວກເຮົາອີກ ນັ້ນຄື ພະຍາດໄຂ້ອອກຕຸ່ມລະບາດ. ຜູ້ທຳອິດທີ່ເປັນແມ່ນ ໂກສເຈຍ ເວັດກອບສະກີ.

ຢູ່ນິຄົມພວກເຮົາບໍ່ມີແພດຈັກຄົນເລີຍ. ເອີກາເຕີຣິນາ ກຣິກໍເຮັບນາ ເຊິ່ງເຄີຍຜ່ານວິຊາການຮ່ຳຮຽນຫນ້ອຍຫນຶ່ງຢູ່ສະຖາບັນແພດສາດ ນັ້ນ ສາມາດແກ້ໄຂສະພາບການບາງຢ່າງໄດ້ເມື່ອເຖິງຄາວ

ຈຳເປັນ ເຊັ່ນໃນກໍລະນີທີ່ພວກເຮົາບໍ່ສາມາດຂາດນາຍຫມໍແທ້ໆຈັກ ຄົນແລະການໄປເອົ້ນເອົາຫມໍມາຍັງນິຄົມພໍ້ກໍເປັນເລື່ອງລຳບາກຫຍຸ້ງ ຍາກສຳລັບພວກເຮົາເກີນໄປ. ຜ່ານມາ ນາງມີຄວາມຊ່ຽວຊານຂຶ້ນ ຫລາຍໃນເລື່ອງປິ່ນປົວຂີ້ຫີດ ແລະວິທີປະຖົມພະຍາບານແບບຮີບ ດ່ວນ ໃນກໍລະນີເກີດບາດແຜສິດ ຄືມີດບາດ, ນ້ຳຮ້ອນລວກໄຟ ໄຫມ້ຫນັງເຫລົ້ນ...ແລະໃນລະດູຫນາວ ຍ້ອນເກີບຊະນິດຄຸນນະ ພາບຕ່ຳຂອງພວກເຮົາ ຫລາຍຄົນຈຶ່ງມີຕີນກະແດ້ງ ທ້ັງຫມົດນີ້ ແມ່ນ ພະຍາດຕ່າງໆທີ່ນັກຮຽນຂອງພວກເຮົາຍອມຮັບ ເພາະວ່າ ການພົບ ປະກັບທ່ານຫມໍແລະກິນຢານັ້ນ ທຸກຄົນມີທ່າທີອຽ່ງໄປທາງດຽວກັນ ຫມົດ.

ຂ້າພະເຈົ້າເອງຮູ້ສຶກນັບຖືນ້ຳໃຈຂອງພວກເຂົາຫລາຍໃນເລື່ອງນີ້ ພວກເຂົາບໍ່ສະແດງວ່າ ຮຽກຮ້ອງຫຍັງເປັນພິເສດເລີຍບໍ່ວ່າການຮັກ ສາພະຍາບານ, ຫລືເລື່ອງອື່ນໆ. ຂ້າພະເຈົ້າໄດ້ຮຽນຮູ້ຫລາຍອັນ ຫລາຍແນວນຳພວກເຂົາ. ການມີອຸນຫະພູມ ສູງ ອົງສາ ນັ້ນ ສຳລັບພວກເຮົາບໍ່ຖືວ່າເປັນຄົນເຈັບ ແລະເລື່ອງນີ້ໄດ້ກາຍມາເປັນ ເລື່ອງທຳມະດາຢ່າງຫນຶ່ງ. ແລ້ວພວກເຮົາສະແດງຄວາມອົດທົນ ເຂັ້ມແຂງແຂ່ງກັນ. ຈັ່ງຊັ້ນ ຈຶ່ງເປັນອັນວ່າ ຍ້ອນເຫດຜົນງ່າຍໆອັນ ນີ້ແລ້ວ ຫນ້ອຍເທື່ອທີ່ສຸດ ແພດຫມໍຈຶ່ງອອກມາກວດສຸຂະພາບ ຂອງພວກເຮົາ ແລະມາຢ່າງບໍ່ເຕັມໃຈຈັກຫນ້ອຍ.

ຍ້ອນເຫດນີ້ ເມື່ອໂກສເຈຍລົ້ມເຈັບ ແລະມີອຸນຫະພູມຮອດ ๔๐ ອົງສາ ພວກເຮົາຈຶ່ງບັນທຶກເຫດການນີ້ໄວ້ໃນຖານະວ່າເປັນ ເລື່ອງແປກໃຫມ່ອັນຫນຶ່ງຢູ່ໃນຊີວິດຂອງຊາວນິຄົມ. ເພີ່ນໃຫ້ມັນ

ນອນຢູ່ຕຽງແລະແຫ່ລ້ອມພ້ອມທີ່ຈະເຮັດທຸກຢ່າງໃຫ້ມັນ. ໃນຕອນ ແລງພວກຫມູ່ຂອງມັນ ມາເຕົ້າໂຮມກັນຢູ່ອ້ອມຕຽງ, ຈັ່ງຊັ້ນ ຈຶ່ງມີ ຄົນຕັ້ງຫລວງຫລາຍມາຫຸ້ມມັນຢູ່ສະເຫມີ. ເພື່ອບໍ່ໃຫ້ມັນຂາດ ເພື່ອນ ແລະເພື່ອບໍ່ໃຫ້ພວກເດັກນ້ອຍອຸ່ນວາຍໃຈ ພວກເຮົາເອງກໍ ໄປຊຸມກັນຢູ່ຂ້າງຕຽງຄົນເຈັບຕະຫລອດແລງ.

ຫລັງຈາກນັ້ນສາມມື້ ເອົາເຕີຣິນາ ກຣິກໍເຣັບນາ ຄຶດສະດຸ້ງ ໃຈ, ມາປຶກສາກັບຂ້າພະເຈົ້າ, ນາງຄຶດວ່າມັນອາດເປັນພະຍາດໄຂ້ ອອກຕຸ່ມ. ຂ້າພະເຈົ້າຫ້າມບໍ່ໃຫ້ເດັກນ້ອຍເຂົ້າໃກ້ຕຽງ ໂກສເຈຍ ແຕ່ເກີຢ່າງໃດ ມັນກໍເປັນເລື່ອງເຫລືອວິໄສ ທີ່ຈະແຍກບ່ຽວມັນໄດ້ ຢ່າງຈິງຈັງເດັດຂາດເພາະວ່າ ພວກເຮົາບໍ່ມີບ່ອນເຮັດວຽກແລະບ່ອນ ເຕົ້າໂຮມກັນໃນຍາມຕອນແລງບ່ອນອື່ນເລີຍ.

ຕໍ່ມາອີກມື້ຫນຶ່ງຫລືສອງມື້ ອາການຂອງໂກສເຈຍຫນັກຫນ່ວງ ລົງຕື່ມ, ພວກເຮົາເອົາຜ້າຟາຫນາມາຫໍ່ເອົາມັນ ແລ້ວເອົາໄປນອນ ໃສ່ລົດມ້າ. ຂ້າພະເຈົ້າຂັບລົດມ້າພາມັນເຂົ້າໄປໃນເມືອງ.

ຢູ່ຫ້ອງຕ້ອນຮັບຂອງໂຮງຫມໍ ມີຄົນຢູ່ປະມານສີ່ສິບກ່ວາ ບາງ ຄົນຢືນບາງຄົນນອນຮ້ອງຄາງອຸ່ມໆ. ຕັ້ງຄົນແພດຈຶ່ງອອກມາ, ເບິ່ງ ບາດນອກໍຮູ້ວ່າ ມີຄົນເຈັບລົ້ນໂຮງຫມໍມາຄົນແລ້ວ ຈັ່ງຊັ້ນການຈະ ເອົາຄົນເຈັບເຂົ້າມານອນຕື່ມອີກຈັກຄົນນັ້ນ ມັນບໍ່ອາດໃຫ້ຜົນດີສະ ເຫມີໄປ. ໃນທີ່ສຸດ ແພດກໍອອກມາ, ລາວປົດເສື້ອກວດເບິ່ງ ເວດກິບສະກີ ຂອງພວກເຮົາຢ່າງເມື່ອຍໆ, ດ້ວຍສຽງຫມົ້ນໆຂຶ້ນດັງ ລາວເວົ້າເຕື້ອຍໆກັບແພດຜູ້ຊ່ອຍທີ່ຂຽນບັນທຶກວ່າ:

-ໄຂ້ອອກຕຸ່ມ, ສົ່ງໄປຢູ່ຕຶບສໍາລັບຄົນໄຂ້ສະເພາະ.

ຢູ່ໃນທົ່ງແຄມເມືອງແຫ່ງຫນຶ່ງ ມີເຮືອນຕູບໄມ້ປະມານ ๔๐ ຫລັງ ເສດເຫລືອມາແຕ່ສະໄຫມສົງຄາມຕັ້ງຢາຍຢູ່. ຂ້າພະເຈົ້າຍ່າງເລາะอ้อมไປมาละหอ่างพอกนางพะยาบานคืนเจับ ແละพะนักงานหามเปที่ກຳລັງสินละอ้อมเอົาคืนเจับที่นอนอยู่ในผ้าที่มออกมาจากเปหาม. มีคืนบอกข้าพะเจ้าว่า ແพดผู้ช่อยต้องเป็นผู้ธับคืนเจับ ແต่บໍ่มีใผธู้ว่าลาวไปใส, ลาวอยู่ใสและบໍ่มีใผยากไปฉอกหาลาว. ในที่สุด ข้าพะเจ้ากໍหมิดความอิดทินจ๋ำร้องใส่นางพะยาบานคืนหนึ่งช่ำอยู่ใก้งทั้น, ต่ำว่าต่ำขานด้วยคำสับปะเพด "เป็นตาหน่าย", "บໍ่มีมะนุดสะทำ", "เป็นตาอีดงด". โหสะของข้าพะเจ้าสำแดงผิมของมันทันที: เพิ่นมาแก้เสื้อโกสเจย แล้วเอามันไป.

เมื่อกับมาเกิงบิคืม ข้าพะเจ้าได้ธับฮ่าวว่า ชาโดธอบ, อิดชาจิ ແละเบยลูกิน ล้มป่วยด้วยอุนหะพูมฮะหนาดงอกัน. นอกนี้ข้าพะเจ้ายังพ้ ชาโดธอบที่ยังพໍยืนยู่ได้ โต้กงางกับเอิกาเตีธินา ภธิกໍเธับนา ที่บังคับร้ายใช้มันนอนยู่ตงาง:

- โย้ว เจ้านี้แม่นเป็นคืนแนอใดเกาะ? เป็นหยังฮ้อยฉิต้องไปนอน? นายช่างตีเหล็กโฉฟธิง ฉิบ่อฮ้อยเชิาใสอง...

- โฉฟธิงฉิบ่อเจ้าแบบใด? เว้าโลเลหลาย...

- บ่อแบบลาวบ่อติอเองทั้นแหล้อ: เหล้าอิดกาแด่, หมากเผ็ดใหย่, เกือ, น้ำยานาพะโตน กับน้ำมันกะแล็ดหน้อยหนึ่ง! ชาโดธอบ ธ้องตอบด้วย

ສຽງຈະແຈ້ງຈົງໃຈທັງຫົວຂໍ້ນແບບກົງໄປກົງມາ ຄືຕາມປົກກະຕິຂອງ
ມັນ.

-ເບິ່ງເອົາເທາະ, ອານໂຕນ ເຊມືອໂນວິດ, ເຈົ້າເຮັດໃຫ້ເຂົາ
ໄດ້ໃຈພໍຊໍ່າໃດ! ເອົາກາເຕີຣີນາ ກຣິກໍເຮັບນາ ເວົ້າກັບຂ້າພະເຈົ້າ,-
ມັນຊິໃປໃຫ້ ໂຊຟຣົງປ໋ອ!..ໄປນອນດຽວນີ້ ໄດ້ຍິນບໍ່!

ຊາໂດຣອບ ຄືງຮ້ອນປານໄຟ, ເບິ່ງບາດດຽວກໍຮູ້ວ່າ ມັນຍືນ
ເກືອບບໍ່ຢູ່ແລ້ວ. ຂ້າພະເຈົ້າຈຸງແຂນພາມັນຍ່າງກັບຄືນເມືອຫໍພັກ
ໂດຍບໍ່ເວົ້າຫຍັງ. ອິດຊາຈິ ກັບ ເບຍລູກິນ ນອນຢູ່ເທິງຕຽງແລ້ວ.
ອິດຊາຈິນັ້ນຮ້ອງຄາງຢູ່ດ້ວຍຄວາມເຈັບປວດ. ຂ້າພະເຈົ້າສັງເກດ
ເຫັນແຕ່ດົນແລ້ວວ່າ ພວກ "ນັກກ້າມ" ຫມູ່ນີ້ ບໍ່ສາມາດສູ້ທົນກັບ
ຄວາມເຈັບປ່ວຍໄດ້ດີເທົ່າໃດ. ກົງກັນຂ້າມ ເບຍລູກິນນັ້ນຍາມໃດກໍ
ຍັງຄືເກົ່າມັນນີອາລົມດີສະເຫມີ.

ຢູ່ໃນນິຄົມຂອງພວກເຮົານີ້ຄົງບໍ່ມີມະນຸດຜູ້ໃດເບີກບານແຈ່ມໃສ
ເທົ່າກັບເບຍລູກິນ. ຫມໍເປັນລູກຊົນຊັ້ນກຳມະກອນເກົ່າແກ່
ເມືອງ ນິຊະນີ ຕາກຊິນ, ມັນຫນີຈາກເຮືອນເມື່ອຄາວເກີດໄພອຶດ
ຫົວ ເພື່ອຊອກຫາກິນທາງອື່ນ, ມັນຖືກຈັບຢູ່ນິດສະກູ ເມື່ອຕຳ
ຫລວດທຳການກວາດລ້າງ ແລ້ວຖືກສົ່ງໄປຢູ່ເຮືອນເດັກນ້ອຍກຳພ້າ
ບ່ອນຫນຶ່ງ, ຕໍ່ມາມັນລັກຫນີອອກໄປຫາກິນຕາມແຄມກະຫນິນ.
ຖືກຈັບໄດ້ອີກເທື່ອຫນຶ່ງແລ້ວລັກຫນີອີກ. ຫມໍເປັນຄົນເອົາວຽກເອົາ
ງານດີ, ພະຍາຍາມບໍ່ລັກແຕ່ມັກໄປທາງຊື້ຂາຍຫລາຍກ່ວາແຕ່ຕາມ
ການເວົ້າຂອງມັນພ້ອມດ້ວຍສຽງຫົວແບບຈົງໃຈນັ້ນປາກົດວ່າ ກົດ
ຈະການຊື້ຂາຍຂອງມັນນັ້ນ ເຕັມໄປດ້ວຍຄວາມກ້າຫານແປກປະ

ຫລາຍ ແລະປາສະຈາກຄວາມສຳເລັດເປັນປະຈຳ. ເບຍລູກິນ ສຳ
ນຶກໄດ້ເອົາເອງວ່າໂຕມັນເອງບໍ່ມີຄວາມສາມາດໃນວິຊາຊີບອັນນີ້ ຈັ່ງ
ຊັ້ນຈຶ່ງຕັດສິນໃຈ ເດີນທາງມາຍັງອຸກຮາອິນ.

ມັນເຄີຍເຂົ້າໄປນັ່ງແປ້ນມ້າຢູ່ໃນໂຮງຮຽນມາແລ້ວຫລາຍ ເທົ່ອ ຮູ້ຫລາຍອັນແຕ່ອັນລະເລັກລະນ້ອຍແລະກໍມີແຕ່ເທົ່ານັ້ນເອງ, ຫມໍ ເປັນເດັກໄຮ້ການສຶກສາພິລຶກ. ນິຄົນປະເພດນີ້ຫລາຍຢູ່ຄືພວກເຂົາ ໄດ້ຮຽນຮຽນອ່ານມາເປັນຢ່າງດີ, ຮູ້ຈັກເຮັດເລກປັນສ່ວນແລະ ມີຄວາມຮັບຮູ້ກ່ຽວກັບຄົດໄລ່ເກີ່ງຜິນກຳໄລ ແຕ່ຄວາມຮູ້ເຫລົ່ານີ້ ຝັງ ຕິດຢູ່ໃນມັນສະຫມອງນ້ອຍໆຂອງພວກເຂົາແບບບໍ່ກົ້ກຕ້ອງຂະຫນາດ ວ່າຜິນຮັບຂອງມັນກໍເປັນຕາຢາກຫົວໄປນຳ. ພາສາເວົ້າຂອງເບຍລູ ກິນເອງບໍ່ກົ້ກຕ້ອງດີ ແຕ່ຫາກແຝງດ້ວຍແວວສະຫລຽວສະຫລາດ ແລະວ່ອງໄວແບບຫນ້ຳຢູ່.

ຂະນະທີ່ນອນຢຽດຍາວຢູ່ເທິງຕຽງ ມັນໄປ່ລິ້ມຢູ່ບໍ່ເຊົາ, ຄືຕາມ ປົກກະຕິນັ້ນແລ້ວ ສັນຫາຄຳສັບຕະຫລົກ ເຊິ່ງບໍ່ມີໃຜຄາດຫມາຍ ມາເວົ້າອັນເຮັດໃຫ້ປະສົບທີ່ຜິນຂອງການສັບຊ້ອນຄຳສັບຂອງມັນທະ ວີຄູນຂຶ້ນອີກ:

-ພະຍາດໄຂ້ອອກຕຸ່ມນີ້ຫວະ ມັນແມ່ນຜິນຜະລິດຈາກຄວາມ ສະຫລຽວສະຫລາດຂອງການແພດ ແລ້ວເປັນຫຍັງຈຶ່ງເລືອກມາຕິດ ອົກຕິດໃຈເຮົາລະ? ເຮົາມັນຊິນຊັ້ນກຳມະກອນມາແຕ່ເກີດພຸ້ນນ່າ. ເຮົາບອກໂຕເດ້ວ່າ ຍາມໃດລະບອບສັງຄົມນິຍົມມາຢູ່ກັບພວກເຮົາ, ເວລານັ້ນຫລະອັດປະຕູໃສ່ຫນ້າພວກແມ່ພະຍາດເຊື້ອທ່ອນ ຫມູ່ນີ້ ໂລດແຫລ້ວ, ກ້າບັ່ງເອີນ ມັນເກີດມີຄວາມກ່ອນແລ່ນມາ, ພວກ

ເຮົາກັຍດັບດັອດຕາກິນໃຫ້ມັນສາຫລໍ່ວ່າ ເອົາຂັນອົ່ນໃຫ້ມັນ ເພາະ
ວ່າເກົ່ງຢ່າງໃດມັນກໍມີສິດ ມີຊີວິດຢູ່ຄືກັນ, ຈັ່ງຊັ້ນກະເຊີນມັນໄປ
ຕິດຕໍ່ນຳເລຂານັກຂອນເຮົາພຸ້ນກ່ອນ. ເລື່ອງເລຂານີ້ມອບໃຫ້ຫມໍ
ໂກນກາ ແວກຊະເນັບໂລດ ເພາະວ່າຫມໍນີ້ມັນເສືອກແຕ່ງດອງກັບ
ປົ໊ມເດ້ ຕິດກັນອ້ອນຕ້ອນປານຫມາກັບຫມັດ. ກ່ອນກັບວອກພວກ
ບັນຍາຊິນນີ້ໃຫ້ຫມໍໂກນກາຈັດການຊ່ຳຊາວ່າ ລະຫວ່າງແມ່ພະຍາດ
ເຊື້ອທ່ອນກັບໂຕຫມັດນັ້ນແມ່ນອັນໃດເຫມາະສົມກັບຄວາມດຸ່ນດ່ຽງ
ແບບປະຊາທິປະໄຕກວ່າກັນ.

-ເອີ້ ເຮົາຊິເປັນລ...ເລ...ຂາດອກ ແຕ່ໂຕຫັ້ນຕິໂຕ
ຊິ...ຊິ...ເຮັດຫຍັງ ເມື່ອລະບອບສັງຄົມນິຍົມມາຮອດ? ໂກນກາ
ແວກຊະເນັບ ກາມ໊ຂຶ້ນແບບຄົນປາກຜ້ຳ.

ໂກນກາ ນັ່ງຢູ່ຕົ້ນຕຽງຂອງ ເບຍລູກິນ, ໃນມືມີປົ໊ມຫົວຫນ່ຳຄື
ຕາມປົກກະຕິຂອງມັນ ແລະກໍຄືຕາມປົກກະຕິອີກຫົວຂອງມັນຫຍອງ
ຫຍ້ຳ ແລະເສື້ອກໍຂາດລ້ອຍ.

-ເຮົາຊິຂອນກົດຫມາຍວ່າດ້ວຍວິທີນຸ່ງຫົ່ມສຳລັບໂຕ ເພື່ອໃຫ້
ໂຕມີວາດຊິງ້າຍມະນຸດຂຶ້ນແດ່, ບໍ່ໃຫ້ມີທ່າທາງຄືຄົນພະເນຈອນທີ
ເຮັດໃຫ້ຮອດຫມໍ ໂຕສະກາ ໂຊໂລແວັບ ຢາກອວາກໃສ່. ໂຕຢາກ
ເປັນນັກອ່ານແຕ່ມີທ່າທີບໍ່ຕ່າງຫຍັງກັບລີງໂຕຫນຶ່ງ. ເຮົາບໍ່ຢາກເວົ້າ
ວ່າບໍ່ມີກົງໃສ່ສັດອັນໃດໄວ້ໃສ່ລີງດຳຄືໂຕໄວ້ໃຫ້ຄົນເບິ່ງເລີຍ. ໂຕວ່າ
ບໍ່ໂຕສະກາ?

ພວກເດັກນ້ອຍຫົວຂ້ວນ. ແວກຊະເນັກ ບໍ່ຄ່ຽງດອກ, ແກ່ນ
ຕາສີຂີ້ເທົ່າຂອງຫມໍແນມເບິ່ງ ເບຍລູກິນ ຢ່າງຮັກແພງອົບອຸ່ນ.

ສອງສ່ວນນີ້ມານິຄົມນຳກັນ, ເຮັດວຽກຢ່າງບ່າຄ່ຽງໄລ່ກັນຢູ່ໂຮງຕີເຫລັກ ແຕ່ຂະນະທີ່ ເບຍລູກິນ ຕີເຫລັກໃສ່ແທ່ນຮອງຢູ່ນັ້ນ ໂກນກາຊ້ຳມັກເປັນຜູ້ຢຽບຄັນສູບຫລາຍກ່ອນ ເພື່ອໃຫ້ມີເປົ້າຫນຶ່ງຫວ່າງພໍໄດ້ຈັບປັ໊ມ.

ໂຕສະກາ ໂຊໂລແອັບ ເຊິ່ງສ່ວນຫລາຍຫມູ່ເອີ້ນວ່າ ອານໂຕນ ເຊມືອໂນວິດ (ຊື່ນ້ອຍແລະຊື່ພໍ້ຳກັບຂ້າພະເຈົ້າ) ມີອາຍຸບໍ່ກາຍ ๑๐ ປີ. ເບຍລູກິນ ໄປພົບມັນນອນສະຫລົບຍ້ອນຄວາມຫິວຢູ່ໃນປ່ານິຄົມຂອງພວກເຮົາ. ມັນມາອູກຮາອິນ ຈາກເຂດແຂວງຊາມາຣາ ພ້ອມດ້ວຍພໍ່ແມ່ ແຕ່ລະຫວ່າງທາງມັນຫລົງກັບແມ່ເລີຍຈົ່ບໍ່ໄດ້ວ່າ ເກີດຫຍັງຂຶ້ນໃນຂັ້ນຕໍ່ມາ. ໃບຫນ້າຂອງມັນງາມຫນ້າຮັກແຈ່ມໃສ ແບບເດັກນ້ອຍແລະຍາມໃດໃບຫນ້ານັ້ນກໍຫັນໄປຫາແຕ່ ເບຍລູກິນ. ແນ່ນອນວ່າ ຊີວິດນ້ອຍໆຂອງມັນດຳເນີນໄປຢ່າງບໍ່ມີຫຍັງຫນ້າຕິດອົກຕິດໃຈຮຸນແຮງເປັນພິເສດ ແລະເບຍລູກິນ ອ້າຍບ່າວນັກເວົ້າຕະຫລົກຜູ້ບໍ່ຮູ້ຈັກຄວາມຢ້ານແຕ່ຮູ້ຈັກຄຸນຄ່າຂອງທຸກຢ່າງດີກ່ວາ, ຫມູ່ຄົນນີ້ຍາມໃດກໍດຶງດູດແນວຄິດຈິງໃຈຂອງຫມໍ ແລະຜູກມັດມັນໄວ້ກັບໂຕເຂົາ.

ໂຕສະກາ ຢືນຢູ່ຕີນຕຽງຂອງ ເບຍລູກິນ; ດວງຕາຄູ່ນ້ອຍຂອງມັນເປັ່ງປະກາຍແຫ່ງຄວາມຮັກແພງອົບອຸ່ນ ແລະຊື່ນຊົມ, ສຽງເສາະໃສແບບເດັກນ້ອຍຂອງມັນດັງກ້ອງຂຶ້ນວ່າ:

- ລົງດຳ!

- ນີ້ລະ ໂຕສະກາຂອງເຮົາ, ມື້ຫນຶ່ງມັນຈະກາຍເປັນຄົນສຳຄັນ ເບຍລູກິນ ເວົ້າທັງດຶງມັນໄປທາງຫ້ອຕຽງໃກ້ໆກັບໂຕເຂົາ.

ໂຕສະກາ ເກົ້ເຂີນ, ກົ້ມຫົວລົງໃສ່ຊົ່ທ້ອງຂອງເບຍລູກິນ ເຊົ່ງ ມີ້ຜ້າຟ້າຜືນຫນາປົກຫຸ້ມຢູ່.

-ນີ້ນ່າ ໂຕສະກາ, ນ້ຽ່າໄປສົນໃຈນ້ຳປົ້ມຄົ້ຫມໍ ໂກນກາເດ້ົ, ນ້ຽເບ່ົ່ງເອົ້າໂລດວ່າ ປົ້ມເຮັດໃຫ້ຫົວສະຫມອງຫມໍ້ຫຍຸ້ງຈ່ຳໃດ.

-ມັນບ່ໍ່ໄດ້ອ່ານປົ້ມດອກເດ້ົ...ກ້ຽກັນຂ້ານ ປົ້ມຫັ້ນນ່ານ້ຶ່ນສະ ຫມອງມັນ, ຊາໂດຣອບ ຮ້ອງມາໃສ່ຈາກຕ່ຽງຂ້ຽງຄ່ຽງ.

ຂ້ານ້ພະເຈ້ົ້ານ້ັ່ງຢູ່ໃກ້ໆພວກເຂົ້ົາ, ຫລົ້ນຫມາກເລ໊ືກກັບກາຣາບາ ນ້ິບ ແລະຄ໊ຶດຮຸ່ມໆວ່ານ ''ພວກເຂົ້ົາລ໊ືມໄປວ່ານ້ຳລ້ັ່ງເປັ້ນໄຂ້ອອກ ຕຸ່ມ...''

-ສູ້ຜູ້ໃດຜູ້ຫນ້ຶ່ງ ໄປເອ້ົ້ນ ເອ໊ືກາເຕ໊ືຣິນາ ກຣ໊ືກໍ່ເຮັບນາ ມາດຸ!- ຂ້ານ້ພະເຈ້ົ້ານ້ບອກ.

ເອ໊ືກາເຕ໊ືຣິນາ ກຣ໊ືກໍ່ເຮັບນາ ແລ່ນມາ, ທ່ານ້ານ້ຄ້ານ້ານ້ ເທ້ອະດ້ານ້ຳລ້ັ່ງສູນ:

-ໃຫ້ແມ່ນຫຍ້ັ່ງນ້ີ້ນ້ຳ ຈ້ັ່ງແມ່ນອ້ອຍອ່ົ່ນກັນນ້ໍ! ໂຕສະກາ ມາ ວ໊ິນວ່ານ້ອ່ົ່ຫຍ້ັ່ງຢູ່ຫນ້ີ້ຮ໊ຶ? ພວກເຈ້ົ້ານ້ຄ໊ຶດຈ້ັ່ງໃດກັນນ້ີ້ນ່ານ? ບ່ໍ່ຫ້ານ້ ເລ໊ືຍ!

ໂຕສະການ້ອ້ຍຈ໊ຶ່ງລ່ານ້ກ້ອ້ຍອ້ອກຈ້ານ້ກ່ຽງ ແລະຫລ້ອ້ຍຫນ້ືອ້ອກ ໄປ, ກ້ານ້ຣ້ານ້ບ້ານ້ິບ ຫຸ້ມແຂນມັນໄວ້, ຫ້ົວເ້ົ່ານ້ອ່ອນໂ້ຍບ້ລ້ົ ຍ້ອນ ເກ໊ືດຍ້ານ້ຂ໊ຶ້ນມ້ານ້ຢ່ານ້ງຈ້ັ່ບ້ໃຈ, ມັນ້ກ້ອ້ຍເ້ົ້ານ້ໄ້ປ້ລ໊ືຢູ່ແ້ຈ້ຫນ້ຶ່ງຢ່ານ້ງ້ບ່ໍ່ຮູ້ ຈ້ະ້ເຮັດ້ແ້ນ້ວ້ໃດ.

-ຂ້ອ້ຍ...ກ້ະ້ຍ້ານ້ຄ໊ຶ້ກ້ັນ...

ຊ້ານ້ໂ້ດ້ຣ້ອ້ບ ຮ້ອ້ງ້ມ້ານ້ໃ້ສ່ສ້ານ້ງ້ແ້ຫ້ບ້ງ້ວ່ານ້:

- ໂຕສະກາ ນ້ຳເອົາ ອານໂຕນ ເຊນືອໂນວິດ ໄປນຳແດ່ແມ້, ເຮັດໃດນ້ຳຈ່ຳຊ້ຳໝລາວລ່ະ?

ເອີກາເຕີຣີນາ ກຣີກໍເຮັບນາ ກວາດສາຍຕາແນມເບ່ງກຸ່ມຄົນທີ່ເບີກບານນ້ີຢ່າງທ້ຳແທ້ໃຈ.

- ບໍ່ຕ່າງຫຍັງກັບພວກຊູລູຊ! ນາງອຸທານຂຶ້ນ.

- ພວກຊູລູຊ ໂລດແມ່ນພວກຊີເປ້ືອຍສ້ີງບໍ່ນຸ່ງເລາະທ່ຽວໄປມາ, ແລ້ວສຳລັບອາຫານການກິນພວກເຂົາເອົາຫມູ່ຄູ່ ແລະຜູ້ຮູ້ຈັກລ້ຳເຄ້ືຍຫ້ັນລະ, ເບຍລູກິນ ເວ້ົາຂຶ້ນຢ່າງເຄ້ັ່ງຂຶ້ມ, - ເລລາໃດອ້າຍບ່າວພວກນ້ີ້ພ້ຜູ້ສາວ ມ້ນກໍຈະເວ້ົາວ່າ: "ອະນຸຍາດໃຫ້ອ້າຍເນ້ືອສ້ີງເນາະ", ແລ້ວຜູ້ສາວກໍຕອບຄືນຢ່າງດ້ີໃຈວ່າ: "ບໍ່ຕ້ອງລ້ີບກວນອ້າຍດອກ, ນ້ອງເນ້ືອສ້ີງໂຕເອງກໍໄດ້", -"ໂອ່, ບໍ່ນ່າ...ເປ້ັນໄປບໍ່ໄດ້ດອກທ້ີຈະປ່ອຍໃຫ້ນ້ອງເນ້ືອຜ້ດນ" ເຂົາເວ້ົາ ແລະແລ້ວບໍ່ທ້ັນທ້ີເຂົາພານາງໄປຮອດແຈທາງຊ້ຳ ມ້ນກໍໂໝ່ມສາວນ້ັນເຂ້ົາປາກແລ້ວເດ້...ຢ່າງບໍ່ຈ້ຳແຈ່ວຊ້ຳນ່າ.

ຢູ່ແຈຫ້ອງເລ້ືກໆພຸ້ນ ມ້ສຽງຫ້ວແຈ່ມໃສຂອງ ໂຕສະກາ ດ້ງລອດອອກມາ. ເອີກາເຕີຣີນາ ກຣີກໍເຮັບນາເອງກໍຫ້ວຍ້ົມໄປຄ້ືກັນ:

- ຢູ່ພຸ້ນພວກຊູລູຊກິນຜ້ສາວ ແຕ່ຢູ່ຫ້ນ້ີເພ້ິນປ່ອຍໃຫ້ເດ້ກນ້ອຍມາເກ້ືອກກ້ືວກັບຄົນເປ້ັນໄຂ້ອອກຕຸ່ມ, ມ້ນອ້ນຕະລາຍທ່ໆກັນນ້ັນລະ!

ແວກສະແນ້ບ ສວຍໂອກາດແກ້ແຄ້ນ ເບຍລູກິນຄືນທ້ັນທ:

- ພ...ພວກ ຊູ...ລູຊ ບະ ບໍ່ກິນ ຜ...ຜ້ສາວເດ້...ພວກເຂົາ...

ຊະສືອີໄລ...ກວ່າມະນຶງອຶກ...ສ່ວນນຶ່ງ...ຫ...ຫັ້ນ ມັນແມ່ແລ້ວ ວ່າ...ໂ. .ຕສະກາຊີຕິດພະຍາດນໍານຶ່ງ.

-ແລ້ວເຈົ້າເອງເດ້ລະ ແວກຊະແນັບ, ເປັນຫຍັງຈຶ່ງມານັ່ງຢູ່ເທິງຕຽງຫນ່ວຍນີ້? ເອິກາເຕີຣິນາ ກຣີກໍເຮັບນາທ້ວງຂຶ້ນ ເມື່ອສັງເກດເຫັນມັນ, -ພ້າວອອກໄປດຽວນີ້ໄວ!

ແວກຊະແນັບ ຕິກຂະມ່າ ລົງມືເກັບມ້ຽນເອົາປຶ້ມທີ່ກະຈາຍຢາຍຢູ່ເທິງບ່ອນນອນຂອງ ເບຍລູກິນທັນທີ.

ຊາໂດຣອບ ສອດຂຶ້ນວ່າ:

-ມັນບໍ່ແມ່ນຜູ້ສາວ! ເບຍລູກິນບໍ່ສວາບມັນດອກ!

ໂຕສະກາທີ່ກອຍອອກໄປຢືນຢູ່ຂ້າງ ເອິກາເຕີຣິນາ ກຣີກໍເຮັບນາ ແລ້ວນັ້ນ ກໍເວົ້າຂຶ້ນແບບຄົນຄຶດຫນັກວ່າ:

-ມັນບໍ່ກິນລົງດໍາດອກ.

ແວກຊະແນັບອອກໄປ ເອົາປຶ້ມຕັ້ງຫອບຫນີບໄວ້ກ້ອງແຂນເບື້ອງຫນຶ່ງ ສ່ວນອີກເບື້ອງຫນຶ່ງນັ້ນມືໃຜທັນເຫັນວ່າມັນເຮັດແນວໃດ ທັນຄຸບເອົາ ໂຕສະກາທີ່ເຕັ້ນຍອດໆທັງຫົວຢູ່ຫັ້ນໄປພ້ອມ. ຈາກນັ້ນ ຄົນກຸ່ມນີ້ທັງຫມົດກໍໄປລ້ອມວາບຟາບລົງໃສ່ຕຽງຂອງ ແວກຊະແນັບທີ່ຢູ່ແຈຫ່າງຫມູ່ທີ່ສຸດ.

ເຊົ້ານ້ໍ່ຕໍ່ມາ, ກະບະກວນແບບເລິກໆເບິ່ງຄ້າຍຄືໂລງ ສ້າງຂຶ້ນຕາມການອອກແບບຂອງການລິນາ ອີວາໂນວິດ ບັນທຸກຄົນຈົນແຫນ້ນ, ຄົນປ່ວຍໄຂ້ອອກຕຸ່ມຂອງພວກເຮົາ ຕຸ້ມຜ້າຫົ່ມນັ່ງແຫຍ້ກັນຢູ່ໃນກະໂລ່ງອັນນີ້. ຢູ່ສົ້ນເບື້ອງຫນຶ່ງຂອງກະໂລ່ງພວກເຮົາເອົາແປ້ນແຜ່ນຫນຶ່ງກ່າຍພາດອອກມາໃຫ້ພວກເຮົາຄ້ຽວພະເຈົ້າ ກັບ

ບຣາເຊັນໂກ ນັ່ງຄາບ. ແນວຄິດຈິດໃຈຂອງຂ້າພະເຈົ້າເວລານັ້ນສັບສົນຫນັກຫນ່ວງ ເພາະຂ້າພະເຈົ້າສົງຫວນໃຈວ່າ ເຫດການອັນຫນ້າເບື່ອຫນ່າຍຄືເມື່ອເອົາເວດກົບສະກີໄປເຂົ້ານອນຢູ່ໂຮງຫມໍນັ້ນ ຄົງຈະເກີດຂຶ້ນອີກ. ຍິ່ງໄປກ່ວານີ້ ຂ້າພະເຈົ້າຍັງບໍ່ຄັກໃຈວ່າພວກເດັກນ້ອຍທີ່ໄດ້ໄປຢູ່ພຸ້ນຈະໄດ້ຮັບການປິ່ນປົວຫລືບໍ່.

ອິດຊາຈິ ນອນຢູ່ກັບພື້ນກະບະ ແລະດຶງຜ້າຫົ່ມໃຫ້ປົກບ່າໄຫລ່ຢ່າງຫົນຫ່ວຍ. ຜ້າຫົ່ມຂອງຫມໍຂາດຈີນແນມເຫັນປຸຍຝ້າຍສີດຳຫມົ່ນລອດອອກມາ ແລະຢູ່ຊິດກັບປາຍຕີນຂ້າພະເຈົ້ານັ້ນ ຂ້າພະເຈົ້າ ກໍແນມເຫັນເກີບໂບກສັ້ນກ້ຳຫນຶ່ງ ຂອງອິດຊາຈິ, ມັນເກົ່າຂາດແລະບິດບ້ຽວ. ເບຍລູກິ ເອົາຜ້າຫົ່ມຂຶ້ນປົກຫົວແລ້ວກ້ຽວພັນຕົວຈົນເປັນຄືກະບຶ້ງອູດຫລຸດພັນເວົ້າວ່າ:

- ໃຫ້ບ້ານໃຫເມືອງເຫັນແບບນີ້ຄືດວ່າ ພວກເຮົາແມ່ນຄຸນພໍ, ພວກເຂົາຄືຊິປະຫລາດໃຈແລະຖາມກັນວ່າເປັນຫຍັງ ເຂົາຈຶ່ງແກ່ຄຸນພໍ່ຫລາຍອີ່ງໄປແບບນີ້?

ຊາໂດຣອບ ບໍ່ຕອບໄດ້ແຕ່ຫົວ ນັ້ນສະແດງວ່າມັນປ່ອຍຫນັກສົມຄວນແລ້ວ.

ຢູ່ຕູບຄົນປ່ວຍ, ສະພາບການຍັງຄືເກົ່າ. ຂ້າພະເຈົ້າພົບນາງພະຍາບານທີ່ຢູ່ຫ້ອງ ໂກສະເຈຍ. ນາງຫ້າມຝີຕີນອັນເລັ່ງຜ້າອທີ່ກຳລັງເຄື່ອນໄປຕາມຮ່ອມລະບຽງໄວ້ຢ່າງຍາກຊາ.

- ເວດກົບສະກີ ຢູ່ຫ້ອງນີ້ແມ່ນບໍ?

- ມັນເປັນແນວໃດ?

- ຍັງບໍ່ຮູ້ເທື່ອ.

ອານໂຕນ ບຣາເຊັນໂກ ເງືອດໄມ້ແສ້ຕີມ້າ ຢູ່ເບື້ອງຫລັງຂອງ ນາງທັງເວົ້າວ່າ:

-ຈ່ຳຊິກະມີ, ຍັງບໍ່ຮູ້ເທື່ອ ຄັກນໍ!

-ບັກນ້ອຍນີ້ມານຳເຈົ້າຫວະ? ນາງພະຍາບານແມມເບິ່ງ ບຣາ ເຊັນໂກດ້ວຍທ່າທີ່ຂົ້ງດເພາະເຂົາສົ່ງກິ່ນເຫມັນຂອງມູນສັດ ແລະ ຕາມສົ່ງກໍມີເສັ້ນເພື່ອງຫ້ອຍຕ່ອງແຕ່ງຢູ່ເຕັມ.

-ພວກເຮົາມາແຕ່ນີ້ຄືນກ້ອກກີ. ຂ້າພະເຈົ້າເລີ່ມເວົ້າຂຶ້ນຢ່າງ ລະມັດລະວັງ, -ນັກຮຽນຂອງເຮົາຜູ້ຫນຶ່ງມາຢູ່ຫນີ້ແລ້ວ ແລະດຽວ ນີ້ຂອຍເອົາມາຕື່ມໃຫ້ເຈົ້າອີກ ສີ ຄົນ ເບິ່ງຄືຊິເປັນໄຂ້ອອກຕຸ່ມຄືກັນຢ່າງແນ່ນອນ.

-ເຊີນໄປພ້ອພັນກັບພະແນກຮັບຄົນເຈັບ.

-ຄົນເຕັມພໍແຮງແລ້ວ, ນອກນີ້ຂ້ອຍຍັງຢາກໃຫ້ພວກເດັກ ນ້ອຍຫມູ່ນີ້ ໄດ້ນອນຢູ່ໃກ້ກັນ.

-ພວກເຮົາບໍ່ສາມາດເຮັດຕາມໃຈທຸກຜູ້ທຸກຄົນດອກ - ເວົ້າ ແລ້ວນາງກໍອອກຢ່າງຫນີ.

ແຕ່ ອານໂຕນ ຂວາງທາງນາງໄວ້:

-ແມ່ນຫຍັງເກາະ? ເປັນແນວນີ້ຫວະ? ເຈົ້າຕ້ອງເວົ້າກັບ ແຂກໃຫ້ຮຽບຮ້ອຍກ່ອນຕິ.

-ສະຫາຍ, ເຊີນໄປຫ້ອງຕ້ອນຮັບ, ຂ້ອຍບໍ່ມີເວລາມາຢືນ ເວົ້າກັບພວກເຈົ້າຢູ່ຫນີ້! ນາງພະຍາບານໃຈຮ້າຍໃຫ້ອານໂຕນ, ສ່ວນຂ້າພະເຈົ້າກໍໂມໂຫຂຶ້ນຄືກັນ:

-ນຶ່ງຊິໄປທາງໃດລະໄປເດ໊, ໃຜບອກໃຫ້ນຶ່ງມາກ່ຽວຂ້ອງນຳຮ໊?

ເກີ່ງປານນັ້ນ ອານໂຕນ ກໍຍັງບໍ່ຖອຍຫນີຈາກບ່ອນ, ມັນຈົ້ອງ ແນມເບິ່ງພວກເຮົາ ຄືຂ້າພະເຈົ້າກັບນາງພະຍາບານດ້ວຍຄວາມປະ ຫລາດໃຈ, ຂ້າພະເຈົ້າເວົ້າກັບນາງຕໍ່ດ້ວຍນ້ຳສຽງຮ້າຍໆຄືເກົ່າວ່າ:

-ຂໍຄວາມກະລຸນາອົດຟັງຈັກສອງສາມຄວາມແດ່ ນາງເອີ້ຍ! ຂ້ອຍຕ້ອງການໃຫ້ເດັກນ້ອຍຫມູ່ນີ້ໄດ້ຮັບການປິ່ນປົວຊ່ວງເຊົ້າ. ແຕ່ ລະຄົນທີ່ເຈົ້າປິ່ນປົວເຊົ້າ ຂ້ອຍຂໍຕອບແທນດ້ວຍແປ້ງສາລີ ๔ ປຸດ ແຕ້ຂ້ອຍຢາກຕົກລົງເລື່ອງນີ້ກັບຄົນຫນຶ່ງຄົນດຽວ. ເວດກອບສະກີ ຢູ່ຂ້າງຂອງເຈົ້າແລ້ວ ຈົ່ງຊັ້ນເຈົ້າຊິຈັດການແນວໃດກໍຈັດການ ເພື່ອ ຮັບເອົາພວກສາມຄົນນີ້ໄວ້ຕື່ມອີກ.

ນາງພະຍາບານ ຢຸດຈົ້ອງກັບບ່ອນ, ບາງທີນາງອາດຊິຄຽດກໍເປັນ ໄດ້.

-ເຈົ້າຫມາຍຄວາມວ່າແນວໃດ "ແປ້ງສາລີ" ນັ້ນນ໊ະ? ຄ່າ ນ້ຳຊາກາເຟຊັ້ນຫວະ? ຂ້ອຍບໍ່ເຂົ້າໃຈ!

-ບໍ່ຫມາຍຄວາມວ່າເປັນຄ່ານ້ຳຊາກາເຟດອກ ແຕ່ແມ່ນຮາງ ວັນ, ເຈົ້າເຂົ້າໃຈແລ້ວເບາະ? ຖ້າເຈົ້າບໍ່ຕົກລົງ ຂ້ອຍກໍຈະໄປເວົ້າ ກັບຄົນໃຫມ່. ບໍ່ແມ່ນການຈອບອ່ອຍໃຫ້ຄ່ານ້ຳຊາກາເຟຫຍັງຫນິດ, ພວກເຮົາພຽງແຕ່ຂໍໃຫ້ເອົາໃຈໃສ່ເປັນພິເສດ ຕໍ່ເດັກນ້ອຍພວກເຮົາ ຈົ່ງຊັ້ນຈົ່ງອາດຊິມ້ວງກຕື່ມຂຶ້ນ, ມັນເປັນແນວນີ້ນ່າ, ພວກເຂົາ ເຄີຍອົດເຄີຍຢາກມາແລ້ວ ຖ້າເປັນລູກກຳ້ພ້າບໍ່ມີພໍ່ແມ່...ເຈົ້າເຂົ້າ ໃຈບໍ່?

-ຂ້ອຍຊິຮັບເອົາພວກເຂົາຢ່າງບໍ່ຕ້ອງມີແປ້ງນັ້ນກະໄດ້, ຖ້າວ່າ ເຈົ້າຕ້ອງການ, ພວກເຂົາມີນຳກັນຈັກຄົນ?

-ດຽວນີ້ ຂ້ອຍເອົາມາສາມ ແຕ່ຄືຊິໄດ້ເອົາມາຕື່ມອີກຢ່າງ ແນ່ນອນ.

-ໄປ! ຊັ້ນນ໊ະ.

ອານໂຕນ ກັບຂ້າພະເຈົ້າ ຍ່າງຕິດຕາມນາງໄປ, ອານໂຕນ ເສືອດແສງຕາອັນມີຄວາມຫມາຍສະຫລອກກອກໃສ່ນາງພະຍາບານ ທ້າແກວ່ງຫົວໄປມາ ແຕ່ມັນເອງ ກໍສະແດງຄວາມຕື່ນເຕັ້ນອອກມາ ຢ່າງຈະແຈ້ງທີ່ເຫັນວ່າເຫດການຫັນປ່ຽນໄປແບບນີ້. ເມື່ອຂ້າພະ ເຈົ້າປະຕິເສດທີ່ຈະຕອບສະຫນອງມັນດ້ວຍການຍັກຄ້ວລ໊ວຕາ ມັນ ກໍຍິນຍອມຢ່າງສຸພາບຮຽບຮ້ອຍ.

ນາງພະຍາບານ ພາພວກເຮົາໄປຍັງຫ້ອງຫນຶ່ງ ອ່າວໄກຫມູ່ ແດ່. ອານໂຕນ ອອກໄປຮັບເອົາພວກຄົນເຈັບທັງສາມ.

ເປັນທໍາມະດາວ່າ ທ້າງສາມຄົນພວກເຂົາ ເປັນພະຍາດໄຂ້ອອກ ຕຸ່ມຫມົດ. ນາຍແພດຜູ້ຊ່ອຍກວດການເບິ່ງຄົນເຈັບນັ້ນດ້ວຍຄວາມ ປະຫລາດໃຈແບບຫນຶ່ງຕໍ່ສະພາບເກົ່າຂາດສ້ອຍຂອງຜ້າຟາຂອງພວກ ເຂົາ ແຕ່ນາງພະຍາບານບອກກັບເຂົາດ້ວຍນ້ໍາສຽງດັດດ່ຽວວ່າ:

-ພວກເຂົາມາແຕ່ນີ້ຄືມກ໊ອກກີ, ຈັດໃຫ້ພວກເຂົາຢູ່ຫ້ອງຂ້ອຍ ເລີຍ.

-ແຕ່ຫ້ອງຂອງເຈົ້າບໍ່ມີບ່ອນຫວ່າງຕ່ວາເບາະ?

-ພວກເຮົາຊິຈັດການເອງດອກ. ມັນມີສອງຄົນຈະອອກໂຮງ ຫມໍແລ້ວ ສະນັ້ນຄົງບໍ່ເປັນການຍາກປານໃດທີ່ຈະຍັດຕຽງຫນ່ວຍ ທີສາມເຂົ້າໃສ່.

ເບຍລຸກັນສັ່ງລາພວກເຮົາຢ່າງເບີກບານວ່າ;

- ເອົາຫມູ່ມາຕົ້ມໃຫ້ພວກເຮົາອີກແດ່ ມັນຈົ່ງອີບອຸ່ນດີ!

ພວກເຮົາເຮັດໃຫ້ຄວາມປາດຖະຫນາຂອງມັນກາຍເປັນຈິງໄດ້ ຄື ສອງມື້ຕໍ່ມາ ກໍເອົາ ໂກໂລສ ກັບຊະແນແດກ ມາສົ່ງ ແລະອາທິດຫນຶ່ງຕໍ່ມາ ກໍເອົາມາຕົ້ມອີກສາມຄົນ. ເປັນແຕ່ບຸນທຸກຢ່າງຍຸດຕິລົງຄ່ານີ້!

ອານໂຕນ ກັບຄືນໄປໂຮງຫມໍຫລາຍເທື່ອ ເພື່ອຖາມຂ່າວຄາວອາການຂອງພວກຫມູ່ເພື່ອນຂອງມັນນໍານາງພະຍາບານ. ປາກົດວ່າໄຂ້ອອກຕຸ່ມບໍ່ສາມາດແຜ່ລາມໃສ່ເດັກນ້ອຍນິຄົມພວກເຮົາ ໄດ້ເທົ່າໃດ.

ວັນຫນຶ່ງ ໃນຂະນະທີ່ກໍາລັງກຽມກັນວ່າຈະໄປຮັບເອົາຜູ້ໃດຜູ້ຫນຶ່ງກັບມາຢູ່ນັ້ນ ພວກເຮົາກໍແນມເຫັນວ່າຢູ່ກ້າມກາງແສງແດດຕອນທ່ຽງຂອງລະດູບານໃຫມ່ພຸ້ນ ມີເງົາຮ່າງຫນຶ່ງ ສັ່ນຍ້ອນເຢາະແຢະຢູ່ໃນຜ້າຟາແຄມປ່າ, ມັນໂປໂລອອກມາແລ້ວມຸ່ງຫນ້າມາຫາໂຮງຕີເຫລັກ ສົ່ງສຽງແຫລມແຈດມາກ່ອນວ່າ:

- ເຮ້ຍ ພັກພວກທັງຫລາຍ ເປັນແນວໃດເວ້ຍ? ໂທ້ນີ້ ໂຕຍັງງົມອ່ານຫນັງສືຢູ່ຕາມເຄີຍຫວະຫນີ? ລະວັງເດີ້ບ່ຳ... ສະຫມອງໂຕຊິໄຫລອອກທາງຫູແລ້ວເດ້...

ພວກເດັກນ້ອຍຕົກສະເງົ້າຕົ້ຄ້າງໄປຫມົດ: ເບຍລູກິນຈ່ອຍແຄ້ງແຍ້ງ ຫນ້າຈືດເຜົ່ນ ແຕ່ຍັງຄົງແຈ່ມໃສຄືແຕ່ກ່ອນບໍ່ຜິດ, ບໍ່ມີສິ່ງໃດເຮັດໃຫ້ມັນຫວັ່ນເກງເລີຍກໍາລັງຢືນຢູ່ຕໍ່ຫນ້າພວກເຂົາ.

ເອກາເຕີຣິນາ ຟ້າວລີ່ໄປຫາມັນ ສໍ້ສົນວ່າເປັນຫຍັງມັນຈົ່ງຍ່າງກັບມາເອງ, ເປັນຫຍັງບໍ່ລໍຖ້າໃຫ້ເພື່ນໄປຮັບ?

-ເອົາເຕີຣົນ ກຣີກເຮັບນາເອ້ຍ, ມັນເປັນຊີ້ນ່າ, ຂ້ອຍກໍ ຢາກອົດທົນລໍຄອຍຢູ່ດອກ! ມັນອະທິບາຍ, -ແຕ່ຂ້ອຍຫົນຫວຍ ເບື່ອຂອງກົນພີ້ວກ, ຂ້ອຍຄຶດວ່າ...ຢູ່ນີ້ຄົນພັກພວກໂລດໄດ້ກົນເຂົ້າ ຈີ່ດຳ, ກອນບວກ, ກາຊາເຕັມກ້ວຍເຕັມຊາມ ສ່ວນວ່າຂ້ອຍຫວະ ເຈົ້າຮູ້ບໍ່ ຂ້ອຍຮູ້ສຶກຄືກັບວ່າມີໂຕອີ່ຫຍັງໄຕ່ຍຸບໆຢູ່ໃນສະຫມອງ... ຂ້ອຍບໍ່ສາມາດອົດທົນເບິ່ງພວກເຂົາກົນແກງເອ້ເລັ້ນ ຕໍ່ໄປໄດ້ອີກ ເທົ່ານັ້ນລະ ຮີຮີໆ!

-ແມ່ນຫຍັງກັນ ແກງເອ້ເລັ້ຫັນນະ?

-ໂອ້ຍ...ເຈົ້າຮູ້ຕີ່ວ່າ ໂກໂກນ ໄດ້ພັນລະນາເກົ່ງແກງຢ່າງຫນ້ຳ ຄືແນວນີ້ໄວ້, ຂ້ອຍມັກສຸດໃຈເລີຍລະ, ແລ້ວຢູ່ໂຮງຫມໍພວກເພິ່ນ ນິຍົມຢາຍແກງເອ້ເລ້ັນນີ້ລະໃຫ້ຄົນປ່ວຍກົນ, ພໍແຕ່ຂ້ອຍເຫັນທ່ໍ ນັ້ນລະ ຂ້ອຍກະອົດທ້ວບໍ່ຟ້ງ, ມັນອົດບໍ່ໄດ້ແທ້ໆຫນ້ີໃດ...ບໍ່ໄດ້ຫ້ວ ຄືໃຈຊີຂາດ. ທ່ຳອົດເອ້ຍແພດຫັ້ນກະຮ້ຳຍຂ້ອຍລະບໍ ແຕ່ັ້ນນັ້ ຍ່ຳເຮັດໃຫ້ຂ້ອຍຫ້ວຫລາຍຂ້ຶ້ນອີກ ພໍແຕ່ຂ້ອຍຄຶດເຫັນສັບແກງເອ້ ເລ້ັ່ທ່ັ້ນລະ, ຂ້ອຍມີແຕ່ຫ້ວກັບຫ້ວ ແລະຕ້ອງມັນບໍ່ໄດ້ເລີຍລະ, ຂ້ອຍຈັບບ່ວງມາໄວ້ຊ່ືໆ. ຂ້ອຍຫ້ວຈົນຊີຕາຍເອົາຊ່ືໆ, ຍ້ອນແນວ ນ້ີລະ ຂ້ອຍຈ່ຳຫນ້ີອອກມາ. ຕາຍ ພວກເຈົ້າກົນເຂ້ົ້າກັນແລ້ວຫວະ ຫນ້ີ? ັ້ັ້ມນຄຸມກາຊາເນາະ?

ເອົາເຕີຣົນ ກຣີກເຮັບນາ ຊອກຫານ້ຳນົມມາໄດ້ແຕ່ບ່ອນໃດ ບ່ອນຫນ້ຶ່ງໃຫ້ັ້ນ ເພາະວ່າ ກາຊາ ນັ້ນບໍ່ເຫມາະສຳລັບຄົນປ່ວຍ ຫາກໍຊ່ວງເຊົ້ານ້ີ້ເທ່ົ່ອ.

ເບຍລຸກົນ ຂອບອົກຂອບໃຈນາງຢ່າງແຈ່ມໃສ:

- ຂອບໃຈ...ຂອບໃຈຢ່າງສູງທີ່ຊຸບຊີວິດຂ້ອຍຄືນ.

ເຖົ້າຢ່າງໃດ ມັນກໍກອກນ້ຳນົມລົງໃສ່ກາຊາຢູ່ນັ້ນເອງ. ເອີກາ ເຕີຣີນາ ກຣີກໍເຮັບນາ ແກວ່ງຫົວຢ່າງອ່ອນໃຈນຳມັນ.

ຕໍ່ມາອີກບໍ່ດົນ ຜູ້ອື່ນໆກໍໄດ້ກັບມາມີຄົນເຊັ່ນກັນ.

ອານໂຕນ ເອົາກົງແປ້ງສາລີຂາວໄປສົ່ງໃຫ້ນາງພະຍາບານຢູ່ ເຮືອນກົງຫນຶ່ງ.

ບົດທີ ໑໗

ກຳຂອງ ຊາຣິນ

ເຫດການກ່ຽວກັບລູກຂອງ ຣາອິດຊາ ພະຍາດໄຂ້ອອກຕຸ່ມ ລະດູຫນາວທີ່ເຮັດໃຫ້ປາຍຕີນຂອງພວກເຮົາແຂງກະດ້າງ ການຂົນໄມ້ ທັງຫມົດເຫລົ່ານີ້ຄ່ອຍໆຈືດຈາງໄປຈາກຄວາມຊົງຈຳ ຂອງພວກເຮົາ ແຕ່ຢູ່ພະແນກສຶກສາປະຊາຊົນພຸ້ນ ເພິ່ນຍັງບໍ່ລືມສິ່ງທີ່ເອີ້ນວ່າ "ລະບຽບວິໄນອັນເຄັ່ງຄັດ" ຂອງຂ້າພະເຈົ້າເທື່ອ.

- ພວກເຮົາຊິຈັດການຝັງລະບອບກັກຂັງຂອງເຈົ້າ! ເພິ່ນເວົ້າ ກັບພວກຂ້າພະເຈົ້າແນວນີ້, - ພວກເຮົາຕ້ອງການສ້າງລະບົບສຶກສາ ທາງດ້ານສັງຄົມ ບໍ່ແມ່ນສ້າງຫ້ອງທໍລະມານ!

ຢູ່ໃນບົດລາຍງານກ່ຽວກັບລະບຽບວິໄນນັ້ນ ຂ້າພະເຈົ້າໄດ້ກ້າ ຫານສ່ຽງໃຫ້ເວົ້າເຖິງຄວາມຖືກຕ້ອງຂອງທິດສະດີ ກັບຂໍ້ວິນິດໄສ ເຊິ່ງຮັບຮູ້ກັນທົ່ວໆໄປວ່າການລົງໂທດບໍ່ວ່າປະເພດໃດ ລ້ວນແຕ່ໃຫ້ ຜົນບໍ່ດີທັງນັ້ນແລະວ່າຕົ້ນຕໍແລ້ວ ຂໍ້ວິນິດໄສເຫລົ່ານີ້ບໍ່ຈຳກັດຂອບ ເຂດແຫ່ງແວວປະດິດສ້າງຂອງພວກເດັກນ້ອຍ ແລະສິ່ງສຳຄັນຫລວງ

ຫລາຍອັນຫນ້ຳກໍແມ່ນການມອບທຸກຢ່າງໃຫ້ແກ່ການຈັດຕັ້ງພາຍໃນ
ຕົວເອງ ແລະການໃຊ້ລະບຽບກັບພວກເດັກນ້ອຍເອງ. ຂ້າພະເຈົ້າ
ຍັງອາດຫານສ່ຽງໄພຮອດວາງທິດສະດີຫນ້ຳອອກ ຊຶ່ງໃນສາຍຕາເຈົ້າ
ຂອງເອງແລ້ວ ເຫັນວ່ານັ້ນບໍ່ມີຫຍັງຕ້ານທານໄດ້ນັ້ນກໍແມ່ນວ່າ
ຍ້ອນຈິດສຳນຶກເພື່ອສ່ວນໂຮມບໍ່ໄດ້ເກີດຂຶ້ນເອົາເອງດ້ວຍອົງປະກອບ
ຂອງມັນ ຕາບໃດທີ່ຄວາມນິຍົມຕາມປະເພນີບໍ່ກຳເນີດຂຶ້ນກ່ອນ,
ຕາບໃດທີ່ຍັງບໍ່ມີຄວາມລ້ຳເລີ່ຍຕ່ອງກວ່ານັ້ນຕົ້ນ ແລະວັດທະນະທຳ
ຊີວິດຮ່ວມກັນ, ຄູສອນກໍມີທັງສິດແລະຫນ້າທີ່ໃຊ້ກຳລັງແຮງເຂົ້າ
ຊ່ວຍໃນອາລະຈຳເປັນ. ຂ້າພະເຈົ້າໄດ້ຢືນຢັນອີກວ່າ ເພິ່ນບໍ່ອາດສ້າງ
ພື້ນຖານການສຶກສາທັງຫມົດໃສ່ແຕ່ເລື່ອງສິດຜົນປະໂຫຍດຂອງເດັກ
ເທົ່ານັ້ນ, ທັງນີ້ກໍເພາະວ່າ ການສຶກສາອົບຮົມ ກ່ຽວກັບຫນ້ຳທີ່ນັ້ນ
ສ່ວນຫລວງຫລາຍແລ້ວມັກຂັດກັບສິດຜົນປະໂຫຍດຂອງເດັກເອງ,
ອັນນີ້ຢ່າງຫນ້ອຍກໍແມ່ນຕາມຄວາມເຂົ້າໃຈຂອງພວກເຂົ້າ. ຂ້າພະ
ເຈົ້າຮຽກຮ້ອງໃຫ້ມີລະບົບການສຶກສາຫນ້ຳທີ່ເຝິກຝົນຫລໍ່ຫລອມຄົນ
ຢ່າງແທ້ຈິງ, ໃຫ້ມີຄວາມສາມາດເຮັດວຽກງານຫນ້ຳ ຊຶ່ງເຖິງຈະ
ເປັນວຽກງານອັນຫນ້ຳເບື່ອຫນ່າຍ, ບໍ່ຢູ່ໃນລັດນິຍົມຂອງຕົນກໍຕາມ
ກ້ຳແມ່ນວ່ານັ້ນສອດຄ່ອງກັບສິດຜົນປະໂຫຍດຂອງສ່ວນໂຮມ.

ສະຫລຸບຄວາມແລ້ວ ຂ້າພະເຈົ້າເນັ້ນຍ້ຳເຖິງການປະດິດສ້າງກຸ່ມ
ກ້ອນຫນ້ຳທີ່ເຂັ້ມແຂງເດັດດ່ຽວເຕັມໄປດ້ວຍພະລັງຈິດ, ແລະໃນກໍ
ລະນີທີ່ຈຳເປັນກໍຕ້ອງໃຫ້ມີຄວາມເຂັ້ມງວດນຳອີກ. ຂ້າພະເຈົ້າກໍ່ສ້າງ
ຄວາມຫວັງທັງຫມົດໄວ້ນຳກຸ່ມກ້ອນແບບນີ້ເທົ່ານັ້ນ; ພວກຂັດຄໍຂ້າ
ພະເຈົ້າພົ້ນຫລັກເກນວ່າດ້ວຍກຸມານສາດໃສ່ຫນ້າຂ້າພະເຈົ້າແລ້ວກໍ

ເລີ່ມຈີ່ມວ່າໂດຍອ້າງຄຳວ່າ "ເດັກນ້ອຍຕ້ອງການອັນນັ້ນອັນນີ້" ສະ ເຫມີ.

ຂ້າພະເຈົ້າກຳລັງຕົວໄວ້ພ້ອມແລ້ວ ຖ້າຫາກວ່າ ນິຄົມຈະຖືກອັດ, ແຕ່ຄວາມອຸ່ນອ່ຽນປະຈຳວັນຢູ່ພາຍໃນນິຄົມພວກເຮົາເຊັ່ນ ບັນຫາ ການຫວ່ານແຫ ແລະບັນຫາສ້ອມແປງນິຄົມໃຫມ່ອັນດຽວນີ້ ກໍບໍ່ປ່ອຍໃຫ້ຂ້າພະເຈົ້າ ມີເວລາຈະໄປປອດສະຫມອງນຳເລື່ອງວຽກ ງານຂອງພະແນກສຶກສາປະຊາຊົນ. ເປັນທີ່ຈະແຈ້ງວ່າມີຜູ້ໃດຜູ້ ຫນຶ່ງປ້ອງກັນຂ້າພະເຈົ້າໄວ້ ເພາະວ່າຂ້າພະເຈົ້າຄອງຖ້ຳດົນເຕີບວ່າ ຈະມີຜູ້ມາຄອງຕຳແຫນ່ງຂ້າພະເຈົ້າ, ແຕ່ກໍບໍ່ເຫັນຈັກເທື່ອ. ຖ້າເວົ້າ ໄປແລ້ວ ຈະມີຫຍັງງ່າຍໄປກວ່າການປົດຂ້າພະເຈົ້າອອກຈາກຕຳ ແຫນ່ງລະ?

ຂ້າພະເຈົ້າລະມັດລະວັງບໍ່ໄປໃກ້ໄປກາຍພະແນກດັ່ງກ່າວ ເພາະ ວ່າຢູ່ທົ່ນນັ້ນຜູ້ເວົ້າເກົ່ງຂ້າພະເຈົ້າແບບບໍ່ເປັນມິດຈັກຫນ້ອຍ ທັງເວົ້າ ແບບຫນຶ່ນປະຫມາດນຳອີກຊ້ຳ. ຫົວຫນ້າຜູ້ຫນຶ່ງຂອງຂ້າພະເຈົ້າລະ ເປັນຕົວການ, ເຂົາຊື່ ຊາຣິນ ຊາຍຫນຸ່ມຮູບງາມຜິວກ່ຳແດດຜິມ ດົກດຳເປັນລອນ, ເຈົ້າຜູ້ຈະນຶດຂ້າຫົວໃຈແມ່ຍິງຊິນນະນິດໄດ້ງ່າຍໆ ນັ້ນລະ. ພິສິບຍົກເປັນຮູບຈະແຈ້ງນັ້ນຊຸ່ມປຽກເປັນນິດ ແລະແດງ ຊ້ຳຄືເລືອດ, ວົງຄ້ວ່ຳດົກຫນາ. ບໍ່ມີໃຜຮູ້ວ່າກ່ອນການປະຕິວັດ ເດືອນ ນັ້ນ ເຂົາເຮັດວຽກງານອັນໃດ ແຕ່ບັດນີ້ປາກົດວ່າ ເຂົາ ກາຍເປັນຜູ້ຊ່ຽວຊານສະເພາະໃນເລື່ອງການສຶກສາ ທາງສັງຄົມຄົນ ຫນຶ່ງແລ້ວ. ເຂົາສາມາດໃຊ້ຄຳສັບທີ່ກຳລັງນຳສະໄຫມຈຳນວນຫນຶ່ງ ໄດ້ຢ່າງຫລ່ຽນໄຫລ ແລະຮູ້ຈັກຮ້ອຍຮວາດຄຳເວົ້າອັນຍືດຍາວສຸດບໍ່

ເປັນ ແລະຫ້ວ່າງເປົ່າ ເຊິ່ງເຂົາເຊື່ອຫມັ້ນວ່າ ມັນບັນຈຸຄົງສົມບັດ ອັນສູງຄ່າທາງດ້ານວິຊາຄູ ແລະການປະຕິວັດຢູ່ເຕັມປ່ຽມ.

ເຂົາວາງທ່າທີເປັນສັດຕູກັບຂ້າພະເຈົ້າ ຢ່າງອວດອົ່ງທະນົງຕົວ ນັບແຕ່ມື້ຫນຶ່ງທີ່ຂ້າພະເຈົ້າບໍ່ສາມາດອົດກັ້ນຄວາມຢາກຫົວສຸດແຮງ ໄດ້ພຸ້ນມາ.

ມື້ຫນຶ່ງ ເຂົາມາວຽກຢູ່ນິຄົມຂອງພວກເຮົາ, ເມື່ອແນມເຫັນບາ ຫລອດແທກຄວາມດັນບັນຍາກາດວາງຢູ່ເທິງໂຕະໃນຫ້ອງການຂອງ ຂ້າພະເຈົ້າ ຈຶ່ງຖາມຂຶ້ນວ່າ:

- ແມ່ນຫຍັງລະຫນີ?

- ບາຫລອດແທກບັນຍາກາດ.

- ແລ້ວບາຫລອດແທກບັນຍາກາດຫນີ້ມັນແມ່ນຫຍັງລະ?

- ບາຫລອດແທກບັນຍາກາດກະແມ່ນເຄື່ອງໃຊ້ພະຍາກອນອາ ກາດ! ຂ້າພະເຈົ້າຕອບຄືນທັງປະຫລາດໃຈ.

- ໃຊ້ພະຍາກອນອາກາດຊັ້ນຫວະ? ແລ້ວມັນຊິແທກໄດ້ແນວ ໃດລະ ໃນເມື່ອມັນມາວາງຢູ່ເທິງໂຕະເຈົ້າພີ້! ອາກາດມັນຢູ່ນອກພຸ້ນ ເດ້... ບໍ່ແມ່ນຢູ່ໃນຫ້ອງນີ້.

ມາຮອດຈຸດນີ້ ຂ້າພະເຈົ້າກໍຫົວກ້າກໆອອກມາຢ່າງອົດກັ້ນໄວ້ບໍ່ ຟັງ. ຂ້າພະເຈົ້າອາດຂີ້ມໃຈໄດ້ ຖ້າຫາກວ່າ ຊາຣິນບໍ່ມີທ່າທາງວາດ ລຶງຄົນກປາດອາຈານ ຜູ້ລຶງຄວາມຮູ້ທີ່ເຊື່ອຫມັ້ນໃນຕົວເອງປານນີ້.

ເຂົາຄຸງດຫນ້າແດງຮົນຂຶ້ນ ແລະຖາມວ່າ:

- ເປັນຫຍັງເຈົ້າຈຶ່ງຫົວຈັ່ງຊີ? ນັກສຶກສາສາດເປັນແນວນີ້ຫວະ? ເຈົ້າໃຊ້ວິທີການອັນນີ້ບໍ ສິດສອນນັກຮຽນຂອງເຈົ້ານ໋ະ? ຖ້າເຈົ້າເຫັນ

ວ່າຂ້ອຍບໍ່ຮູ ເຈົ້າກໍຄວນອະທິບາຍບອກຂ້ອຍຕິ ບໍ່ແມ່ນຊິມາຫົວໃສ່ຫນ້າກັນແບບນີ້.

ແຕ່ຂ້າພະເຈົ້າບໍ່ອາດເຮັດໃຈປະເສີດແນວນັ້ນໄດ້ ຈົ່ງມີແຕ່ຫົວຂັ້ກໆຕໍ່ ຜ່ານມາຂ້າພະເຈົ້າເຄີຍໄດ້ຍິນເລື່ອງຕະຫລົກຊະນິດດຽວກັນກັບການໂອ້ລົມກ່ຽວກັບບາຫລອດແທກບັນຍາກາດ ລະຫວ່າງຂ້າພະເຈົ້າກັບຊາຣິນມາແລ້ວ. ຂ້າພະເຈົ້າເຫັນວ່າ ກັນເປັນຕາຍາກຫົວພິລຶກເລື່ອງຫນຶ່ງ ຊຶ່ງທັງໆທີ່ວ່າເປັນເລື່ອງຂີ້ສູດແທ້ໆຍັງເກີດຂຶ້ນຊ້ຳກັນໄດ້ອີກໃນຊີວິດ ໂດຍມີຜູ້ກວດການຈາກກະຊວງສຶກສາປະຊາຊົນເຂົ້າຮ່ວມການສະແດງນຳ.

ຊາຣິນ ອອກຫນີໄປຢ່າງອັບອາຍ.

ເມື່ອຂ້າພະເຈົ້າສະເຫນີບົດລາຍງານກ່ຽວກັບລະບຽບວິໄນ ລາວຈົ່ງຕັ້ງໃຈຕຳຫນິວິຈານຂ້າພະເຈົ້າຢ່າງເອົາເປັນເອົາຕາຍແທ້ໆ ໂດຍເວົ້າວ່າ:

-ລະບົບຈຳກັດຂອງວິທະຍາສາດການແພດ - ສຶກສາສາດຫນຶ່ງໆ ກະທົບໃສ່ບຸກຄະລະພາບຂອງເດັກໂລດ ເຖິງແມ່ນວ່າ ມັນຈະແຕກຕ່າງກັນຢູ່ໃນແຕ່ລະສະຖາບັນ ການສຶກສາທາງສັງຄົມກໍຕາມ ແຕ່ມັນຕ້ອງມີທ່າດີກ່ວາໃນກໍລະນີ ທີ່ມັນສອດຄ່ອງກັບຄວາມຮຽກຮ້ອງຕ້ອງຕາມທຳມະຊາດຂອງເດັກແລະໃນເມື່ອວ່າມັນຊຸກຍູ້ໄຂຫົນທາງໃຫ້ມີການຂະຫຍາຍຕົວ ສຳລັບໂຄງສ້າງຊີວະສາດ, ໂຄງສ້າງເສດຖະກິດ ແລະ ສັງຄົມອັນໃດອັນຫນຶ່ງ ເຖິງຢ່າງນັ້ນພວກເຮົາກໍຍັງສັງເກດເຫັນວ່າ...

ໃນເວລາສອງຊົ່ວໂມງເຕັມໆ ເຂົາກ່ອນຜູ້ຟັງໃຫ້ເຊື່ອບຫລັບໄປດ້ວຍກະແສທານວິທະຍາສາດປະເພດນີ້ເກືອບຢາກວ່າຢ່າງບໍ່ຢຸດຫາຍ

ໃຈເລີ່ຍ ແລະເຮັດຕາເທິບໆຄືຈະຫລັບໄປພ້ອມ ແຕ່ສະຫລຸບລົງ ດ້ວຍສຳນວນຄົມຄາຍອັນນີ້: "ຊີວິດກໍຄືຄວາມຫັນສາ".

ແມ່ນທ້າວຊາຣິນຜູ້ດຽວກັນນີ້ແລ້ວ ທີ່ເຮັດເສັ້ນຂ້າພະເຈົ້າ ເກືອບຕາຍ ໃນລະດູບານໃຫມ່ປີ ໑໙໘໘.

ເລື່ອງມັນມີຢູ່ວ່າ ພະແນກພິເສດຂອງກອງທັບຫນຸນພາກທີ 1 ໄດ້ສົ່ງນັກຮຽນຄົນຫນຶ່ງມາໃຫ້ນິຄົມພ້ອມດ້ວຍຄຳສັ່ງໃຫ້ຮັບເອົາ ຢ່າງ ບໍ່ມີເງື່ອນໄຂ. ອີງການນີ້ເຄີຍສົ່ງເດັກນ້ອຍມາໃຫ້ພວກເຮົາເປັນບາງ ໂອກາດ, ເຊັ່ນອົງການ ເຈກາ* ແລະອົງການອື່ນໆເປັນຕົ້ນ ຈັ່ງຊັ້ນຂ້າ ພະເຈົ້າຈຶ່ງຮັບເອົາຫມໍມາໃຫມ່ເຊັ່ນກັນ. ສອງມື້ຕໍ່ມາ ຊາຣິນ ກໍສັ່ງ ໃຫ້ຂ້າພະເຈົ້າເຂົ້າໄປຫາ.

- ເຈົ້າຮັບເອົາ ເອົກາແນັບ ເບາະ?

- ເຈົ້າ, ແມ່ນແລ້ວ.

- ເຈົ້າມີສິດອັນໃດຮັບເອົານັກຮຽນ ໂດຍບໍ່ມີອະນຸຍາດຈາກພວກ ເຮົາ?

- ເດັກນ້ອຍຜູ້ນີ້ແມ່ນພະແນກພິເສດຂອງກອງທັບຫນຸນພາກ ທີ 1 ສົ່ງໃຫ້ພວກເຮົາ.

- ພະແນກພິເສດຊັ້ນຫວະ? ມັນຊິກ່ຽວຫຍັງກັບຂ້ອຍລະ? ເຈົ້າ ບໍ່ມີສິດຮັບເອົາຜູ້ໃດທັງນັ້ນ ຖ້າບໍ່ມີອະນຸຍາດຈາກພວກເຮົາ.

- ຂ້ອຍບໍ່ສາມາດປະຕິເສດພະແນກພິເສດໄດ້, ແຕ່ຖ້າເຈົ້າເຫັນ

---

* ຊື່ຫຍໍ້ຂອງຄະນະກຳມາທິການພິເສດ ເພື່ອປາບປາມພວກກໍ່ ການຈາລະກຳ, ນ້ຳເພທຳລາຍແລະຄ້າຂອງເຖື່ອນ.

ວ່າ ພະແນກນີ້ບໍ່ມີສິດ ກໍຄວນແກ້ໄຂກັບພະແນກນີ້ເອງ ໂດຍວິທີໃດວິທີຫນຶ່ງ. ຂ້ອຍບໍ່ສາມາດເປັນຈ່າສານຕັດສິນຄວາມໃຫ້ເຈົ້າກັບພະແນກພິເສດໄດ້.

- ສົ່ງ ເອົາເກເນັບ ຄືນດຽວນີ້.

- ອອກຄຳສັ່ງເປັນລາຍລັກອັກສອນມາແມ້.

- ຄຳສັ່ງປາກເປົ່າຂອງຂ້ອຍກໍພຽງພໍແລ້ວ.

- ອອກຫນັງສືຄຳສັ່ງໃຫ້ຂ້ອຍ.

- ຂ້ອຍເປັນນາຍເຈົ້າ ແລະມີສິດສັ່ງຂັງເຈົ້າ ກ ມື້ ໃນທັນໃດ ຍ້ອນໂທດການບໍ່ປະຕິບັດຕາມຄຳສັ່ງປາກເປົ່າ.

- ເຊີນໂລດແຫລ້ວ!

ຂ້າພະເຈົ້າເຫັນແລ້ວວ່າທ່ານຜູ້ນີ້ຮ້ອນຮົນ ຢາກສະແດງສິດອຳນາດໃສ່ຂ້າພະເຈົ້າ ດ້ວຍການສັ່ງຂັງ ກ ມື້. ຈ່ຳຊັ້ນເວົ້າຫຍັງ ເຂົາຊິຕ້ອງການເວົ້າຫາເຫດອື່ນໆ ກໍບໍ່ຮູ້ໃນເມື່ອເຫດຜົນມັນມີຢູ່ພໍແຮງແລ້ວອັນຫນຶ່ງ.

- ເຈົ້າບໍ່ຍອມສົ່ງນັກຮຽນຄົນນັ້ນເພື່ອເບາະ? ເຂົາຖາມຂຶ້ນ.

- ຂ້ອຍຈະບໍ່ສົ່ງມັນຄືນກ້າບໍ່ມີຄຳສັ່ງເປັນລາຍລັກອັກສອນ ຂ້ອຍຍິນດີໃຫ້ສະຫາຍ ຊາຣິນສັ່ງຂັງຫລາຍກ່ວາໃຫ້ພະແນກພິເສດຈັບ... ຊັ້ນນ່າ, ເຈົ້າເຂົ້າໃຈລະຕໍ.

- ແລ້ວເປັນຫຍັງ ເຈົ້າຈຶ່ງຍິນດີໃຫ້ຊາຣິນ ສັ່ງຈັບຫລາຍກວ່າລະ? ທ່ານຜູ້ກວດການຖາມຢ່າງຂຶງຂັງຈິງຈັງ.

- ຂ້ອຍຄຶດວ່າ ມັນຄືຊິດີກ່ວາ ເພາະຢ່າງຫນ້ອຍກໍໄດ້ນອນຢູ່ໃນວົງການການສຶກສາຄືເກົ່າ.

- ຈ່ຳຊັ້ນເປັນອັນວ່າ ເຈົ້າຖືກຈັບແລ້ວ!

ເຂົາຄວາໂທລະສັບມາເວົ້າ:

- ກອງຕຳຫລວດເບາະ? ...ສົ່ງພົນຕຳຫລວດຜູ້ຫນຶ່ງມາຫນ້ໍ ໄວ, ມາຄວບຄຸມຕົວ ຜູ້ອຳນວຍການນິຄົມ ກ້ອກກີ, ຂ້ອຍສັ່ງຂ້ຳ ກ ນ້ໍ... - ຊາຣິນເວົ້າ.

- ຂ້ອຍຊິຕ້ອງເຮັດແນວໃດ? ລໍກ້ຳຢູ່ຫ້ອງການເຈົ້າຫນ້ໍຫວະ?

- ເອີ, ກ້ຳຢູ່ຫນ້ໍລະ.

- ເຈົ້າຊິອະນຸຍາດທ່ຳປາກເປົ່ຳໃຫ້ຂ້ອຍ ອອກໄປບຶດຫນຶ່ງໄດ້ບໍ ຊ່ວຍຊ່ຳພົນຕຳຫລວດມາ, ຂ້ອຍຈະອອກໄປຮັບອັດຕ່ຳເຄື່ອງຈັກ ເລັກຈັກຫນ້ອຍຢູ່ໃນສ່ຳ ແລ້ວສົ່ງເດັກນ້ອຍກັບເມື່ອນິຄົມ.

- ເຈົ້າບໍ່ຕ້ອງຍ້ຳຍຕົນອອກຈາກຫນ້ໍ.

ຊາຣິນ ດຶງເອົ່ຳຫມວກຜ້ຳຫນ່ຳງທີ່ເຫມ່ຳະກັບຊົ່ງຜົມສີດ່ຳຂອງ ເຂົ່ຳ ຈາກຂໍ້ຫ້ອຍເສື້ອ ແລ້ວປົ່ວອອກຈາກຫ້ອງການໄປ. ຂ້ຳພະ ເຈົ້າຕິດຕໍ່ໂທລະສັບໄປຫ່ຳ ທ່ານປະທ່ານກ່ຳມະການບໍລິຫ່ຳນ ຂອງ ເຂດ. ເພ່ິນຟັງເລ່ືອງຂອງຂ້ຳພະເຈົ້ຳຢ່ຳງເອ່ົຳໃຈໃສ່.

- ບໍ່ຕ້ອງໂມໂຫ ສະຫ່ຳຍເອ້ຍ! ຫ່ຳດ່ຳກັບຄົນເຮ່ືອນເຈົ້ຳເສ່ຍໆ ນ້ໍ ຫລ່ືອ່ຳຊິໃຫ້ດ ກ້ຳໃຫ້ຕ່ຳຫລວດມ່ຳຮອດກ່ອນ ແລ້ວບອກ ໃຫ້ມັນໂທມ່ຳຫ່ຳຂ້ອຍ.

ເຈົ້ຳຫນ້ຳທ່ີຕ່ຳຫລວດເຂ້ົຳມ່ຳ:

- ເຈົ້ຳຫວະເປັນຜູ້ອຳນວຍການນິຄົມ?

- ເຈົ້ຳ ແມ່ນແລ້ວ.

- ໄປກັບຂ້ອຍ.

- ປະທານກຳມະການບໍລິຫານສັ່ງໃຫ້ຂ້ອຍເມືອ, ລາວສັ່ງໃຫ້ເຈົ້າໂທລະສັບໄປຫາ.

- ຂ້ອຍຈະບໍ່ໂທໄປຫາໃຜທັງນັ້ນ, ໄປຮອດສະຖານີແລ້ວ ຫົວຫນ້າຂ້ອຍອາດຈະໂທໄປກ້າລາວເຫັນວ່າຈຳເປັນ. ໄປໄດ້ແລ້ວ.

ພໍອອກໄປຮອດກະຫນົນ, ອານໂຕນ ເຮັດຕາຕໍ່ ເມື່ອເຫັນຂ້າພະເຈົ້າມີຄົນຄຸ້ມກັນໄປແນວນີ້.

- ກ້າຢູ່ຫນີ້ເດ໊.

- ເພິ່ນຊິປ່ອຍເຈົ້າໄວບໍ່ລະ?

- ນ້ຳຮູ້ເລື່ອງນີ້ໄດ້ແນວໃດ?

- ເກ້ົາຜົມດຳ ທີ່ຍ່າງກາຍໄປຫວ່າງຫນ້ຳ ບອກຂ້ອຍວ່າ: "ຄົນເມືອນີ້ຄົນສາ, ຜູ້ອຳນວຍການ ນ້ຳບໍ່ເມືອດອກ". ແລ້ວ ພວກແມ່ຍິງໃສ່ຫມວກຫັ້ນກະພາກັນເວ້ົາວ່າ: ນາຍຄຸນ້ຳກ໋ຳຈັບແລ້ວ.

- ກ້າຢູ່ຫນ້ີ ກູຊິຄົນມາດຽວນ້ີລະ.

ມາຮອດສະຖານີ ກໍຕ້ອງລໍກ້ົາຫົວຫນ້ົາກ່ອນ. ຈົນຮອດ ๔ ໂມງ ພຸ້ນ ເຂ້ົາຈ່ຶ້ງມາປ່ອຍຂ້ົາພະເຈ້ົ້າ.

ກວຽນມ້ົາຂອງພວກເຮ້ົາບັນທຸກເຄ່ືອງຂອງຈົນລ້ົນ, ມ້ີທັ້ງກ້ົງ ແລະກະໂລ່ງ. ຂະນະທ່ີມັນພາພວກເຮ້ົາເຄ່ືອນຍ້າຍໄປຊ້ົາໆຢ່ົາງສະຫງ້ົບສະຫງ່ົມຕາມກະຫນົນ ຄາຄ້ົບນັ້ນ, ແຕ່ລະຄົນພວກເຮ້ົາຕ່ົາງ ຄ໋ຶດເກ້ົາທຸລະກ໋ຶດຂອງຕົນ ອານໂຕນ ນັ້ນແນ່ນອນແລ້ວ ມັນຕ້ອງ ຄ໋ຶດເກ້ົາທ່ົ້ງຫຍ້ົາແລະເຟ້ືອງ ສ້ຳລັບສັດ, ສ່ວນຂ້ົາພະເຈ້ົ້າ ຄ໋ຶດຫາ ຊ້ົາຕ້ົາຊ້ົ້ວໂມ້ົ້ງ ບ່ໍແນ່ນອນຂອງຜູ້ອຳນວຍການນ້ົ້ມ. ພວກເຮ້ົາຢຸດ

ກອງນບໍ່ຮູ້ວ່າຈັກທໍ່ໃດເທື່ອ ເພື່ອແປງກົງທີ່ຫຼົ່ນຕົກລົງ ຈາກນັ້ນກໍປີນ
ຂຶ້ນກອງນ ແລ້ວເດີນທາງຕໍ່ໄປ.

ອານໂຕນ ດຶງເຊືອກບັງຫງນມ້າເບື້ອງຊ້າຍແລ້ວເພື່ອລ້ຽວເຂົ້າ
ກະຫນິນໄປນິຄົມ ໃນເວລາດຽວກັນນັ້ນ ມ້າບັກນ້ອຍ ກໍຕົ້ນຍຸບ, ຢຸດ
ຍ່າງທັງເງີກຫົວຂຶ້ນແຮງໆ. ບິນກະຫນິນທີ່ເບ່ງມາຈາກນິຄົມພວກ
ເຮົາ ມີລິດໂອໂຕຄັນຫນຶ່ງ ແລ່ນຈື່ອມາໃສ່ພວກເຮົາດ້ວຍຄວາມໄວ
ຫນ້າຫວາດສຽວ ທັງບີບແກດັງສະນັ່ນ, ມັນມຸ່ງຫນ້າໄປທາງໃນ
ເມືອງ. ຫມວກຜ້າສີຂຽວໃບຫນຶ່ງກາຍແວັບໄປປານສາຍຟ້າແມບ
ສ່ວນ ຊາຣິນ ທີ່ຢູ່ເທິງລິດກໍຟາດແສງຕາຊຸ່ນມົວມາໃສ່ຂ້າພະເຈົ້າ,
ຢູ່ຂ້າງເຂົາມີຊາຍຫນວດໂຕ້ງຄົນຫນຶ່ງ ນັ່ງຫຍຸມຄໍເສື້ອໃຫຍ່ໄວ້,
ເຂົາຜູ້ນີ້ແມ່ນ ເຊກແມັນໂກ, ປະທານອົງການກອດກາກຳມະກອນ
ແລະຊາວນາ.

ອານໂຕນ ບໍ່ທັນມີໂອກາດຕົກໃຈນຳລິດທີ່ແລ່ນກາຍໄປຢ່າງບໍ່
ຄາດຝັນນັ້ນຊ້ຳ. ມ້າບັກນ້ອຍຂອງພວກເຮົາກໍເຮັດໃຫ້ເຄື່ອງເຊືອກ
ບັງຫງນທົ່ຫຍຸ້ງເຫຍີງ, ບໍ່ທັນທີ່ຂ້າພະເຈົ້າຈະມີເວລາຕົກໃຈນຳ
ເລື່ອງນີ້ຊ້ຳ ທັນໃດນັ້ນ ຂ້າພະເຈົ້າກໍເຫັນມ້າຄູ່ຫນຶ່ງແກ່ກອງນກະ
ແຫະຂອງນິຄົມແລ່ນລົ່ວມາໃສ່ພວກເຮົາ, ຟັງສຽງດັງກ້ອງສະນັ່ນ
ທັ່ງໆທີ່ບັນຈຸເດັກນ້ອຍແຫ້ນອັດ. ຜູ້ຢືນຢູ່ຫນ້າຫມູ່ເຮັດຄໍຫົດໆ
ເຂົ້າໃນເສື້ອໃຫຍ່ແມ່ນ ກາຣາບານິບ, ຫມໍເປັນຜູ້ຂັບກອງນ, ແສງ
ຕາທີ່ເປັ່ງອອກຈາກແກ່ນຕາດຳປີ້ຂອງມັນ ແນມນຳລິດໂອໂຕທີ່ຫລິບ
ຫນີນັ້ນ ໂຮງຮຸ່ງພໍປານແປວໄຟ. ກອງນແລ່ນມາດ້ວຍຄວາມໄວສູງ
ໂພດຈຶ່ງບໍ່ສາມາດຢຸດໄດ້ໃນທັນທີ, ພວກເດັກນ້ອຍພາກັນຮ້ອງໂຮ

ແລະໂຕນລົງດິນ, ພະຍາຍາມບັງຄັບໃຫ້ການຣາບານິບຢຸດມ້າ ທັ້ງຫົວ ກັນອົ້ນໆ. ໃນທີ່ສຸດ ການຣາບານິບ ກໍໄດ້ສະຕິ, ເຂົ້າໃຈວ່າ ກຳລັງເກີດ ຫຍັງຂຶ້ນແລ້ວ. ບັດນີ້ ທາງຄົບບ່ອນນີ້ກາຍເປັນຄຶຕະຫລາດນັດ ແຫ່ງຫນຶ່ງແລ້ວ.

ພວກເດັກນ້ອຍໂຫ້ມາຫຸ້ມລ້ອມຂ້າພະເຈົ້າ ສ່ວນການຣາບານິບ ນັ້ນ ເຫັນໄດ້ວ່າເຂົາບໍ່ພໍໃຈເທົ່າໃດທີ່ເຫດການຢຸຕິລົງຢ່າງງ່າຍດາຍ ທຳມະດາແບບນີ້. ເຂົາຮອດບໍ່ລົງຈາກກອງມແລະເມື່ອບັງຄັບມ້າໃຫ້ ລ້ຽວກັບນັ້ນ ຫນໍກໍຈົ່ມຮ້າຍດ່າມ້າຢ່າງໂມໂຫວ່າ:

-ຮ້ຽງ... ມ້ງຊິຫັນບໍ່ຫ໊ໍ... ເວນຕາຍສູເອີ... ຈັ່ງແມ່ນມ້າຄັກ ຫລາຍຕ່ວາຫນໍ!

ໃນທີ່ສຸດ ເມື່ອທັ່ງອາລົມຮ້າຍງວດສຸດທ້າຍອອກມາແລ້ວ ມັນ ກໍດຶງບັ້ງຫຽນຂ້າງຂວາຫັນຫນ້າໄປຫານິຄົມ ແລ້ວຕີມ້າແລ່ນຫອບ ຄືນ ໂດຍບໍ່ປ່ຽນບ່ອນຢືນ, ເງົາມຸມມົວຂອງມັນເຕັ້ນຍ້ອນໄປຕາມ ກະຫນ່ຳນັ້ນເຕັ້ມດ້ວຍບວກຊຸມ.

-ແມ່ນພວກສູເປັນຫຍັງກັນຫນິດ? ຊິແລ່ນໄປນອດໄຟທາງໃດ ຊັ້ນຫວະ? ຂ້າພະເຈົ້າຖາມຂຶ້ນ.

-ແມ່ນພວກສູປ່ວງຫວະ? -ອານໂຕນ ຖາມຕື່ມ.

ພວກເດັກນ້ອຍແຫຍ້ເຂົ້າມາຍາດກັນເລົ່າເລື່ອງທີ່ເກີດຂຶ້ນສູ່ຂ້າ ພະເຈົ້າຟັງ. ຮູບພາບທີ່ພວກເຂົາວາດຂຶ້ນຈາກເຫດການທັ້ງຫລາຍ ນັ້ນມຸມມົວພິລຶກ ທັ້ງໆທີ່ວ່າຫນິດທຸກຄົນພວກເຂົາກໍຢູ່ໃນເຫດການ ນຳ. ພວກເຂົາບໍ່ຮູ້ຢ່າງຈະແຈ້ງຊ້ຳວ່າພາກັນຂຶ້ກອງມກະແທະໃສ່

ຫຍ້າໄປໃສ ແລະຈະໄປເຮັດຫຍັງຢູ່ໃນເມືອງ, ເມື່ອຂ້າພະເຈົ້າຖາມ ເຖິງເລື່ອງຫມູ່ນີ້ ພວກເຂົາຍັງພາກັນແປກໃຈຊ້ຳ.

-ພວກເຮົາຊິໄປຮູ້ໄດ້ແນວໃດ, ໄປຮອດແລ້ວຫາກຊິຮູ້ເອງ ດອກ.

ມີແຕ່ ຊາໂດຮອບ ຜູ້ດຽວທີ່ສາມາດເລົ່າເລື່ອງທີ່ເກີດຂຶ້ນໃຫ້ຂ້າ ພະເຈົ້າຟັງຢ່າງເປັນເລື່ອງເປັນລາວ.

-ເຫດການເກີດຂຶ້ນຢ່າງກະທັນຫັນແທ້ໆໃດ, ໄອພໍປານວ່າ ງູ ແມບລົ້ນເອົາຊື່ໆ. ພວກເຂົາຂີ່ລົດໂອໂຕມາ, ເວົ້າໄດ້ວ່າເກືອບບໍ່ມີ ໃຜ ສັງເກດເຫັນພຸ້ນລະ, ຂອງວ່າຕອນນັ້ນ ພວກເຂົາພວມເຮັດ ວຽກຢູ່. ພວກເຂົາຂຶ້ນໄປຫ້ອງຂອງເຈົ້າ, ຂຶ້ນໄປແລ້ວ ຈັກພາກັນ ເຮັດຫຍັງແດ່ຂ້ອຍກະບໍ່ຮູ, ເລີຍມີຄົນເຮົາຜູ້ຫນຶ່ງໄປເບິ່ງ ແລ້ວມາ ບອກພວກເຮົາວ່າ ພວກເຂົາຄົ້ນລົ້ນຊັກໂຕະຂອງເຈົ້າ. ໂຍ້ວ! ເຮັດ ແນວນີ້ຫມາຍຄວາມວ່າແນວໃດ? ພວກເດັກນ້ອຍຫລາຍຄົນ ແລ່ນ ປຸ້ນໄປຢູ່ລະບຽງຫນ້າຫ້ອງເຈົ້າ ຊ້ຳພໍດີເວລານັ້ນ ພວກເຂົາກໍພາກັນ ອອກມາ. ພວກເຮົາໄດ້ຍິນພວກເຂົາເວົ້າກັບອົານ ອົາໂນວ໊ດວ່າ "ເຈົ້າຮັບພາລະເດ໊", ຕໍ່ຈາກນັ້ນກະຈັກວ່າແມ່ນສຽງຫຍັງຕໍ່ສຽງຫຍັງ ແຫລ້ວ, ບໍ່ຈັກຜູ້ຮ້ອງ ບໍ່ຈັກຜູ້ເຕັ້ນຜູ້ໂດດ ຫຍຸ້ມຄໍເສື້ອໃຫຍ່ພວກ ເຂົາ, ຫມໍບູຮູນຮ້ອງດ້ງກ່ວາຫມູ່, ສຽງມັນກ້ອງໄປທົ່ວນິຄົມເລີຍ ຕອນມັນຖາມວ່າ: "ແລ້ວເຈົ້າເອົາອານໂຕ ໄປໄວ້ໃສ?" ທໍ່ນັ້ນ ລະ, ຟົດຂຶ້ນປານຫມໍ້ນ້ຳຮ້ອນ ຊິຂວ້ຳເອົາຊື່ໆ. ຄັນບໍ່ມີຂ້ອຍກັບ ອົານຢູ່ນຳ ຄືຊິຕົກມຸ່ນອຸ້ຍປຸ້ຍຕ່ວາ, ກະດຸມເສື້ອໃຫຍ່ຂ້ອຍຈົນ ຂາດອອກຫມົດ. ເກົ້າຜົມດຳຫັ້ນເລຍຂ້ອນຈົນຕາຂາວມ້ານໆຕ່ວາ

ແລ້ວ ກໍເປີດໄປຫາລິດທີ່ຢູ່ໃກ້ໆ. ພວກເຂົາບໍ່ທັນມີເວລາອອກໄປ ຮອດໃສດອກ ພວກເດັກນ້ອຍກໍປຸ້ມໄປໃສ່ທັງຮ້ອງທັງໂຮ່ບໍ່ຈັກວ່າຜູ້ ໃດກໍ່ອັນໃດ. ແລະພໍດີໃນເວລານັ້ນ ຫມໍກາຣາບານິບ ໂປໂລມາແຕ່ ນິຄົມໃຫມ່ ກວງນໃສ່ຫຍ້າຂອງມັນຫວ່າງເປົ່າຈັ່ງຊັ້ນມັນກໍເລີຍເຂົ້າ ຮ່ວມຂະບວນນຳ.

ພວກເຮົາກັບເຂົ້າມາໃນນິຄົມ, ກາຣາບານິບ ປົດມ້າອອກຈາກ ແອກກວງນ ເປົ່າຊິງມັນເຊົ່າໂມໂຫແດ່ແລ້ວ ແລະພວມກຽງແກ້ຕົວ ກັບ ອານໂຕນ ເຊິ່ງຕຳຫນິຕິຕຽນມັນຕ່າງໆນາໆ:

-ພວກສູຫັ້ນ ເຮັດກັບມ້າພໍປານວ່າ ມັນແມ່ນຈັກ ເປົ່າດຸບັດນີ້ ມັນເປັນແນວໃດ? ເຫື່ອຍ້ອຍຊະໆໂຕອອກອາຍຮຸ່ນໆ.

-ອານໂຕນ ໂຕກໍຮູ້ຕົວ່າ ພວກເຮົາມີແນວຄຶດຫ່ວງໄຍນຳ ຫລາຍກ່ວາຊິຄຶດຮອດມ້າ? ກາຣາບານິບໂຕ້ຄືນທັງຍິ້ມຢ່າງເບີກ ບານດ້ວຍປາກແລະຕາ.

-ເອີ... ເຮົາເຂົ້າໃຈ ກ່ອນໂຕພໍແຮງແລ້ວນ່າ, ຕັ້ງແຕ່ຢູ່ໃນ ເມືອງພຸ້ນ, ອານໂຕນເວົ້າຂຶ້ນອີກ, -ໃນຂະນະທີ່ພວກໂຕພວມກິນ ເຂົ້າກັນຢ່າງສຳບາຍອາລົມຢູ່ນີ້ ພວກເຮົາຊ້ຳກຸກຕຳຫລວດຈັບຍັດ ເຂົ້າຄຸກ!

ຂ້າພະເຈົ້າພົບວ່າ ພວກຄູສອນພາກັນຍ້ານຈົນຕັບສັ່ນ ກະໂຕ ອ ວານ ອີວາໂນວິດເອງ ກໍຢູ່ໃນສະພາບເກືອບລົ້ມຫມອນນອນເສື່ອ ແລ້ວຄືກັນ.

-ເຈົ້າຄຶດເບິ່ງແມ້ ອານໂຕນ ເຊມີໂນວິດ, ມັນຊິຍຸຕິລົງແບບ ໃດ? ພວກເຂົາຫນ້າມືດຕາມົວດ້ວຍໂທສະປ່າເກືອນແທ້ໆໃດ ຂ້ອຍ

ຈົນຢ້ານວ່າຊີມີການໃຊ້ມີດໃຊ້ພ້າຟຸ້ນລະແມ້ ມີແຕ່ ຊາໂດຣອບຜູ້ ດຽວກອບກູ້ສະຖານະການໄວ້ໄດ້, ມັນບໍ່ເສຍຫົວຄືຫມູ່ຜູ້ອື່ນໆ. ພວກເຮົາພະຍາຍາມຂວາງກັ້ນ ເຮັດໃຫ້ພວກເຂົາກະແຈກກະຈາຍ ອອກ ແຕ່ພໍປານວ່າ ພວກເຂົາເປັນມ້າບ້າຕ່ວາ ທ້ຳຮ້ອງ... ໂອ່...!

ຂ້າພະເຈົ້າບໍ່ສ້ຳຫມ່ວນເດັກນ້ອຍ ແລະເຮັດເສີຍໆຄືກັບວ່າບໍ່ໄດ້ມີ ເຫດການພິເສດອັນໃດເກີດຂຶ້ນ, ພວກເຂົາເອງກໍຄືກັນຮອດບໍ່ຫ່ວງ ຫຍັງຂ້າພະເຈົ້າພໍຄວນ. ສ້ຳລັບພວກເຂົາແລ້ວ ເລື່ອງນີ້ບໍ່ມີຫຍັງ ຫນ້າສົນໃຈພໍປະມານ, ສະມາຊິກນິຄົມກ້ອກກີ້ຕ້ຳເປັນຜູ້ກ່ືສ້ຳຄັນ ເຫດການຕິວຈິງຫລາຍກ່ວາຫມູ່, ບໍ່ມີຫຍັງຢູ່ໃນຄວາມສົນໃຈຂອງ ພວກເຂົາ ນອກຈາກສິ່ງທ່ີກ້ຳນົດພຶດຕິກ້ຳໃນປັດຈຸບັນຂອງພວກ ເຂົາ.

ບໍ່ມີຫມາຍເອ໊ິນຂ້າພະເຈົ້າ ມາຈາກພະແນກສຶກສາປະຊາຊົນ ແລະຂ້າພະເຈົ້າກໍບໍ່ໄປຢຽບສະຖານທ່ີນັ້ນ. ອ້ ທິດຫນ້ຶງຕ່ໍມາ ຂ້າພະ ເຈົ້າມ໊ອງກໄປອ້ີງການກວດການກ້ຳມະກອນແລະຊາວນາ. ເພ່ືນເຊ໊ືອ ເຊ໊ີນໃຫ້ຂ້າພະເຈົ້າໄປພົບກັບປະທານທ່ີຫ້ອງການຂອງເພ່ືນ. ແຊກ ແມ້ນໂກ ຕ້ອນຮັບຂ້າພະເຈົ້າຄ້າຍກັບວ່າຂ້າພະເຈົ້າເປັນຍາດພ່ີນ້ອງ ຜູ້ໃກ້ຊິດຂອງລາວ.

- ເຊ໊ີນນ່ັ ... ທ້ານ ... ນ່ັງຕາມສະບາຍເລີຍ! ລາວເວ້ົາຂ້ຶນ, ບິບມ໊ືຂ້າພະເຈົ້າ ທ້ັງແນມເບ່ິງຫນ້າຂ້າພະເຈົ້າດ້ວຍຮອຍຍ້ີມສິດໃສ.

- ກະຈ່ັງແມ່ນເຈ້ົາມ໊ືຄົນຄັກແນ່ເນາະ! ເຈ້ົາຮູ້ບໍ່ວ່າ ເມ່ືອຟ້ັງຊາຣ໊ືນ ເວ້ົານ້ັນ ຂ້ອຍຄ໊ືດວ່າ ຂ້ອຍຊ໊ືໄດ້ເທ້ັນ ເດັກນ້ອຍຂ້ີຍ້ານ, ໄຮ້ບ້ັນຍາ ເດັກນ້ອຍຂາດຄວາມສຸກແບບນ້ັນນ່ໍ ... ສ່ວນວ່າພວກເຜດນ້ັນຫວ ະ

ໂຍ້ວ ... ໃຫ້ເຈົ້າເຫັນເວລາພວກມັນຫຸ້ມມາໃສ່ພວກເຮົາຫັ້ນຕິ ... ພວກຜີຍັກຍັ້ງບໍ່ທໍ່ນ້ະ, ພວກມັນໂຫ່ຕ້ອນພໍປານວ່າ ຫມາໄລ່ເນື້ອ, ພຶລຶກແທ້ໆໃດ. ຂຶ້ນລົດແລ້ວ ຊາຣິນ ຍັງຈົ່ມວ່າ: "ຂ້ອຍຫວັງວ່າ ພວກເຂົາຄືຊິນຳພວກເຮົາບໍ່ທັນເດ໊", ຂ້ອຍເລີຍຕອບວ່າ: " ບໍ່ມີຊິ ເປັນຫຍັງ ຖ້າວ່າລົດບໍ່ຕົກຂັດ". ອ່າ ... ດີນແລ້ວເດ ... ຂ້ອຍບໍ່ເຄີຍ ເຫັນເລື່ອງຕື່ນເຕັ້ນແບບນີ້, ແຕ່ກ່ອນຂ້ອຍກໍນັບວ່າຜູ້ຫນຶ່ງໃດ໋, ເວລາຂ້ອຍເລົ່າສູ່ຄົນເທວນີ້ຟັງ ເຂົາພາກັນຫົວຈົນເຈັບທ້ອງ ຊິຕົກ ຈາກຕັ່ງຟຸ້ນນ່າ ...

ມິດຕະພາບລະຫວ່າງຂ້າພະເຈົ້າກັບ ແຊກແມັນໂກ ກືກຳເນີດ ນັບແຕ່ນັ້ນເປັນຕົ້ນມາ.

ບົດທີ ๑๒

ພັນທະພາບ ກັບຊົນຊັ້ນຊາວນາ

ການສ້ອມແປງເຄຫາ ແຕຣແກ ກາຍເປັນເລື່ອງຫນັກຫນ່ວງ ແລະຫຍຸ້ງຍາກສຳລັບພວກເຮົາ, ມີອາຄານຫລາຍຫລັງທີ່ບໍ່ພຽງແຕ່ ຕ້ອງສ້ອມແປງຊື່ໆ ແຕ່ເກືອບເວົ້າໄດ້ວ່າ ຄວນປຸກສ້າງຄືນໃຫມ່ ຫລາຍກ່ວາ ພວກເຮົາມັກຂາດເງິນເລື້ອຍໆ ສ່ວນຫລວງຫລາຍ ແລ້ວການຊ່ອຍເຫລືອ ທີ່ພວກເຮົາໄດ້ຮັບຈາກອົງການທ້ອງຖິ່ນນັ້ນ ມັກເປັນໃບເບີກຮັບເອົາວັດສະດຸກໍ່ສ້າງ ເກືອບທຸກໆປະເພດທີ່ຕ້ອງ ໄປຊອກເອົາຢູ່ໃນເມືອງຕ່າງໆ ເຊັ່ນ ກີເຍັບ, ຄາຄົບ, ຢູ່ເມືອງ ເຫລົ່ານີ້ ເພື່ນເບິ່ງເຈ້ຍຂອງພວກເຮົາຢ່າງບໍ່ເອົາຫົວຊາພໍເທົ່າໃດ ແລະມອບສິນຄ້າໃຫ້ພວກເຮົາ ແຕ່ດ້ວຍສິບສ່ວນຮ້ອຍຂອງປະລິມານ

ທີ່ຂໍມາ ຫລືບໍ່ກໍບໍ່ໃຫ້ຈັກຫນ້ອຍເລີຍ. ແຜ່ນແກ້ວຈໍານວນເຄົ່າຕູ້ ລົດໄຟຫນຶ່ງ ທີ່ພວກເຮົາຕໍ່ສູ້ເອົາໄດ້ ຫລັງຈາກທີ່ຕ້ອງທົນອົດໄປມາ ຫາສູ່ເມືອງ ຄາຄົບ ບໍ່ຮູ້ວ່າຈັກເທື່ອແລ້ວນັ້ນ ກຶກອົງການຫນຶ່ງ ທີ່ ມີອົດທິພົນກ່ວານິຄົມຍຶດເອົາຄາຮາງລົດໄຟ ທັງໆທີ່ມັນເດີນທາງ ມາຮອດເມືອງຂອງພວກເຮົາແລ້ວ.

ການຂາດເຂີນເງິນເຮັດໃຫ້ພວກເຮົາຕົກຢູ່ໃນສະພາບຫຍຸ້ງຍາກ ຫລາຍ ສ່ວນເລື່ອງແຮງງານນັ້ນພວກເຮົາຍັ່ງບໍ່ຕ້ອງການຕໍ່ກໍາມະກອນ ລູກຈ້າງມາແຕ່ໃນເມືອງເລີຍ ມີແຕ່ວຽກງານຊ່າງໄມ້ເທົ່ານັ້ນທີ່ ພວກເຮົາລົງມືເຮັດໄດ້ ໂດຍອາໄສການຊ່ວຍເຫລືອຈາກສະມາຄົມ ຊ່າງໄມ້.

ແຕ່ຕໍ່ມາບໍ່ດົນ ພວກເຮົາກໍຄົ້ນພົບບໍ່ພະລັງເງິນຕາແຫ່ງຫນຶ່ງນັ້ນ ຄື ໂຮງມ້ຽນກວຽນ ແລະຄອກມ້າເຊິ່ງເພຫ້າແລ້ວ ຈໍານວນຫລວງ ຫລາຍເຫລືອເຊື່ອຢູ່ໃນນິຄົມໃຫມ່. ເຄຫາ ແຕຣບແກ ມີຄອກມ້າ ສະເພາະປະສົມພັນມ້າ, ແຕ່ໃນເວລານັ້ນ ການລ້ຽງມ້າພັນ ຍັງບໍ່ມີ ຢູ່ໃນໂຄງການການຜະລິດຂອງພວກເຮົາເທື່ອ ແລະນອກຈາກນີ້ ການສ້ອມແປງຄອກມ້າເຫລົ່ານີ້ ໃຫ້ມີສະພາບດີເປັນປົກກະຕິນັ້ນ ແມ່ນຢູ່ນອກເຫນືອກໍາລັງແຮງຂອງພວກເຮົາ. ການີ ອົວາໂນ ວິດ ຈົນເວົ້າວ່າ: "ມັນບໍ່ແມ່ນສໍາລັບຄົນນ້ໍາຫນ້າຄືພວກເຮົາດອກ."

ພວກເຮົາລົງມືມ້ຽງເພ ອາຄານກໍ່ສ້າງເຫລົ່ານີ້ແລ້ວຂາຍດິນຈີ່ ໃຫ້ຊາວບ້ານ. ມີລູກຄ້າຫລັ່ງໄຫລມາເປັນກອງ, ຜູ້ຄົນທີ່ມີກໍາມະ ອ່າວດີແດ່ ຕ້ອງການກໍ່ເຕົາຝັງກັນທຸກຄົນ, ຫລືບໍ່ກໍ່ສ້ອມແປງຫ້ອງ ໃຕ້ດິນ ແລະອີກພວກຫນຶ່ງຄືພວກຊາວນາຮັ່ງນັ້ນ ແມ່ນຍ້ອນຄວາມ

ໂລບອັນເປັນສັນດານປະຈຳຕົວຂອງພວກເຂົາແທ້ໆ ທີ່ເຮັດໃຫ້ພວກ
ເຂົາມາຊື້ກ້ອນດິນຈີ່ພວກເຮົາໄວ້ ພໍພຽງແຕ່ເອົາໄປມ້ຽນໄວ້ຊື່ໆ.

ພວກເດັກນ້ອຍເປັນຜູ້ລ້ຽງມ້ານ້ອຍເພເອງ. ໂຮງຕີເຫລັກໄດ້ຕີ
ເຫລັກງັດໃຫ້ພວກເຂົາ ໂດຍເອົາເຫລັກເກົ່າມາເຮັດເອົາ ຈັ່ງຊັ້ນ
ວຽກງານອັນນີ້ຈຶ່ງດຳເນີນໄປແບບບໍ່ມີຢາມຢຸດ.

ໃນເມື່ອວ່າ ພວກເດັກນ້ອຍເຮັດວຽກເຄິ່ງມື້ ແລະຮຽນຫນັງສື
ຢູ່ຫ້ອງຮຽນແຕ່ເຄິ່ງມື້ແນວນີ້ ໃນແຕ່ລະມື້ ຈຶ່ງມີກຸ່ມນັກຮຽນຍ່າງໄປ
ນິຄົມໃຫມ່ມື້ລະສອງເທື່ອຄືກຸ່ມທີ ๑ ແລະກຸ່ມທີ ๘. ພວກເຂົາ
ທຽວໄປມາລະຫວ່າງສອງນິຄົມດ້ວຍທ່າທາງເອົາໃຈໃສ່ຕໍ່ວຽກງານທີ່
ສຸດ ແຕ່ສິ່ງທັ້ງຫມົດເຫລົ່ານີ້ບໍ່ໄດ້ເກືອດຫ້າມພວກເຂົາ ບໍ່ໃຫ້ຜິກ
ຫນີອອກຈາກເສັ້ນທາງທີ່ເນັ້ງຊື່ໄປຫາການໂຫ່ເນື້ອປະເພດ "ສັດ
ປີກມີຫອນ" ແບບທຳມະດາໆ ນັ້ນເອງ; ໃນລະຫວ່າງທີ່ຝູງໄກ່ຍ່າງ
ອອກມາກາງເດີ່ນ ເພື່ອປ່ຽນບັນຍາກາດແບບຂາດຄວາມຮອບຄອບ,
ການລັກຈັບໄກ່ ແລະໂດຍສະເພາະການກືນມັນໃຫ້ກ້ຽງຫມົດທຸກ
ຕ່ອນທຸກສ່ວນນັ້ນ ນັບໄດ້ວ່າເປັນຂະບວນປະຕິບັດອັນສັບສົນທີ່ຮຽກ
ຮ້ອງໃຫ້ມີທັ້ງຄວາມລະມັດລະວັງ ຄວາມເຂັ້ມແຂງ, ຄວາມໃຈເຢັນ
ແລະຄວາມພິກໄຫວຢ່າງຫລວງຫລາຍ. ຂະບວນປະຕິບັດເຫລົ່ານີ້
ຍິ່ງສັບສົນຫລາຍຂຶ້ນຕື່ມອີກ ຍ້ອນວ່າເກືອຢ່າງໃດພວກເດັກນ້ອຍ
ຂອງພວກເຮົາຍັງມີສາຍພົວພັນອັນໃດຫນຶ່ງຢູ່ກັບວັດທະນະທຳ ແລະ
ບໍ່ສາມາດຂາດໄຟໄດ້.

ໂດຍທົ່ວໄປແລ້ວ ການທຽວໄປເຮັດວຽກຢູ່ນິຄົມໃຫມ່ອຳນວຍ
ໃຫ້ພວກເດັກນ້ອຍ ສ້າງຄວາມໃກ້ຊິດສະຫນິດສະຫນົມກັບຊົນຊັ້ນ

ຊາວນາ ຍິ່ງໄປກ່ວານັ້ ສິ່ງທີ່ດຶງດູດຄວາມສົນໃຈຂອງພວກເຂົາ ຫລາຍກ່ວາຫມູ່ ກໍແມ່ນພື້ນຖານທາງດ້ານເສດຖະກິດຂອງຊົນຊັ້ນ ຊາວນາເອງ. ທັງຫມົດນີ້ເປັນໄປເອງຢ່າງສອດຄ່ອງກັບທິດສະດີປະ ຫວັດວິພາກຂອງລັດທິວັດທຸນິຍົມ ຈັ່ງຊັ້ນໃນຍຸກທີ່ກ່າວເຖິງນີ້ ພວກ ເຂົາຈຶ່ງຫຍັບເຂົ້າໃກ້ຊິດກັບພວກຊາວນາທີ່ສຸດ ໂດຍບໍ່ຕ້ອງກ້າວ ເລີກລີ້ຫາເຫດຜົນທັງຫລາຍ ທີ່ແຕະຕ້ອງເຖິງໂຄງບົນຕ່າງໆດອກ. ພວກເດັກນ້ອຍນິຄົມແຊກຊຶມ ເຂົ້າຮອດສາງເລົ້າຫ້ອງໃຕ້ດິນຂອງ ພວກຊາວນາ ແລ້ວຈັດການກັບຊັບສົມບັດທີ່ກອງພອກພູນຢູ່ນັ້ນດ້ວຍ ຄວາມຄ່ອງໄວສຸດຄວາມສາມາດຂອງພວກເຂົາ ຍ້ອນຮູ້ຢູ່ເຕັມຫົວ ໃຈວ່າພຶດຕິກຳເຫລົ່ານີ້ຂອງພວກເຂົາຕ້ອງປະທະກັບສັນຊາດຕະຍານ ຕ້ານທານແບບເຈົ້ານຳມະສິດນ້ອຍຂອງຫມູ່ປະຊາຊົນ ພວກເດັກ ນ້ອຍ ຈຶ່ງສຸມແຮງໃສ່ການຄົ້ນຄ້ວາສຶກສາປະຫວັດສາດວັດທະນະທຳ ໃນເວລາທີ່ສັນຊາດຕະຍານເຫລົ່ານີ້ ນອນຫລັບຢູ່ນັ້ນກໍຄືໃນເວລາ ກາງຄືນນັ້ນເອງ. ທຸກຢ່າງດຳເນີນໄປຢ່າງສອດຄ່ອງກັບວິທະຍາສາດ ສະເຫມີ ຕະຫລອດໄລຍະຫນຶ່ງ ພວກເດັກນ້ອຍສົນໃຈນຳແຕ່ການ ບຳບັດຄວາມຈຳເປັນຂັ້ນພື້ນຖານອັນດຽວຂອງມະນຸດຊາດນັ້ນຄືການ ມີອາຫານກິນ, ນ້ຳນົມສິດ, ນົມຊຸ້ນ, ນ້ຳມັນເຄັມ, ຫມໍ້ຊຶ້ນ. ທັງຫມົດນີ້ ແມ່ນລາຍຊື່ສັ້ນໆ ເຊິ່ງຊາວນິຄົມກ້ອກກີ ວາງອອກ ເພື່ອສ້າງ "ສຳພັນທະພາບ" ກັບປະຊາຊົນໃນເຂດຊົນນະບົດ.

ຕາບໃດທີ່ຄົນປະເພດ ກາຣາບານິບ, ຕາຣາເນດ, ໂອໂລຄອບ, ອິດຊາຈິ, ມິເຕຍກິນ ສຸມຈິດໃຈໃສ່ການເຮັດວຽກອັນມີພື້ນຖານວິ ທະຍາສາດຫນັກແຫນ້ນດີຢ່າງນີ້ແລ້ວ, ຂ້າພະເຈົ້າກໍສາມາດນອນ

ຕາຫລັບໄດ້ເພາະຄືນພວກນີ້ມີຈຸດເດັ່ນສະເພາະຕົວ ຢູ່ບ່ອນວ່າ ມີ ຄວາມຮອບຮູ້ໃນກິດຈະການຂອງພວກເຂົາດີແລະມີສະຕິຕໍ່ການປະຕິ ບັດນຳອີກ. ຫລັງຈາກກວດກາເບິ່ງຊັບສົມບັດຢ່າງລວກໆ ຕັ້ງແຕ່ ຕື່ນນອນຕາຂຶ້ນໂລດແລ້ວ ປະຊາຊົນຊາວບ້ານກໍສະຫລຸບໄດ້ວ່າ ມີນ້ຳ ນົມເສຍໄປສອງຄັນໂຫ, ຍົ່ງໄປກ່ວານັ້ນໂຫໃສ່ນົມທົ່ວ່ານີ້ຊ້ຳວາງ ຢູ່ບ່ອນເກົ່າ ນັ້ນສະແດງວ່າສະການທົ່ນີ້ມີຜູ້ມາຍັ້ງນຍາມຢ່າງໄດ້ຮັບ ຜົນດີແລ້ວ. ແຕ່ວ່າຫນ່ວຍກຸ້ນແຈຫ້ອງນັ້ງນເຄື່ອງຊ້ຳພັດຢູ່ໃນ ສະພາບດີຮຽບຮ້ອຍຄືເກົ່າ ນັ້ນຍັງອັດແຈບຢູ່, ຫລັງຄາເຮືອນບໍ່ ມີປ່ອງ, ບໍ່ມີສຽງຫມາເຫົ່າ "ວ້ົ...ໂວ້ງ" ໃນຕອນກາງຄືນ ແລະ ປາກົດວ່າວັດຖຸສົ່ງຂອງທຸກຢ່າງທົ່ມີຊີວິດແລະບໍ່ມີຊີວິດໄດ້ນົນຕາເບິ່ງ ໂລກອ້ອມຕົວນັ້ນເອງ ດ້ວຍຄວາມໄວ້ເນື້ອເຊື່ອໃຈ.

ທຸລະກິດດັ່ງກ່າວມີທ່າອຽງຫັນປົ່ນໄປແບບອື່ນທັນທີ ເມື່ອໃດ ແມ່ນພວກຮຸ່ນນ້ອງຢາກທົດລອງເດີນຕາມເສັ້ນທາງແຫ່ງຄວາມສີວິ ໄລເດີກດຳບັນອັນນີ້. ໃນກໍລະນີນີ້ ຫນ່ວຍກະແຈຈະບິດບ້ຽວປ່ຽນ ຮູບໂສມຈົນຜູ້ເປັນເຈົ້າຂອງຕົກໃຈຫວາດກົວໄປນຳ ເພາະເວົ້ານັ້ນ ຕາມຈິງແລ້ວ ຊີວິດຂອງມັນເອງໄດ້ຖືກທຳລາຍດ້ວຍຝີມືຂອງຜູ້ອ່ອນ ຄວາມຊຳນານໃນການໃຊ້ເຫລັກງັດ ເຊ່ືປະດິດຂຶ້ນເພື່ອສ້ອມແປງ ເຄຫາສະການ ແຕຣບແກ. ໃນຄືນນັ້ນ ຫມາບໍ່ພຽງແຕ່ຄາງອຸ່ມໆ ເທົ່ານັ້ນ ແຕ່ຮ້ອງເຫົ່າສຸດແຮງເປັນການຮຽກເອົ້ນໃຫ້ນາຍມັນຕື່ນ, ຄົງມີແຕ່ຄວາມຊັກຊ້າບໍ່ເອົາຫົວຊາຂອງເຈົ້າຂອງເຮືອນເທົ່ານັ້ນ ທົ່ ເຮັດໃຫ້ຫມາບໍ່ໄດ້ຮັບການສະຫນັບສະຫນຸນຢ່າງທ່ວງທັນ. ບໍ່ດົນ ເຄື່ອງມືທົ່ໃຊ້ບໍ່ຄ່ອງແລະຫົກໃຫຍ່ຂອງພວກເດັກນ້ອຍ ກໍເຮັດໃຫ້

ພວກເຂົາຮູ້ສຶກເອົາເອງວ່າ ການຖືກໄລ່ຕິດຕາມໂດຍເຈົ້າຊັບຂີ້ໂຫດ ເຊ່ງຕື່ນຍ້ອນສຽງຫມາເຫົ່າ ຫລືເຈົ້າຊັບຜູ້ຈອບມອຍຄອຍແຂກຍາມ ວ່າການຕັ້ງແຕ່ຕາເວັນຕົກດິນພຸ້ນວ່າ ມັນພຶ້ມພໍ້ລ້ຳໃດ. ສຳລັບຂ້າ ພະເຈົ້າແລ້ວ ຂ້າພະເຈົ້າເລີ່ມຮູ້ສຶກເປັນກັງວົນຕໍ່ການໄລ່ຕິດຕາມ ເຫລົ່ານີ້ແລ້ວ ພວກນ້ຳໄວຮຸ່ນນ້ອຍແລ່ນສຸດແຮງເກີດ ກັບຄືນມາຍັງນິ ຄົມ ສິ່ງດັ່ງກ່າວບໍ່ເຄີຍເກີດຂຶ້ນຈັກເທື່ອກັບພວກຮຸ່ນໃຫຍ່. ເຈົ້າຊັບ ນຳມາຮອດນິຄົມ ປຸກຂ້າພະເຈົ້າຂຶ້ນມາແລະຮຽກຮ້ອງໃຫ້ສິ່ງໂຕຂຶ້ກະ ໂມຍ, ແຕ່ວ່າຜູ້ກ່ຽວທັນໄດ້ຫນີ້ນເຂົ້າບ່ອນນອນແລ້ວຮຽບຮ້ອຍ. ຈັ່ງຊັ້ນຂ້າພະເຈົ້າ ຈຳຕ້ອງໄດ້ຖາມຫນ້າຊື່ງວ່າ:

- ເຈົ້າສາມາດຊີ້ໂຕມັນໄດ້ບໍ?

- ຊີ້ໄດ້ແນວໃດ? ຂ້ອຍພໍແຕ່ເຫັນມັນແລ່ນເຂົ້າມາຫນີ້.

- ບາງທີອາດຊິບໍ່ແມ່ນເດັກນ້ອຍນິຄົມພວກເຮົາຕິ? ຂ້າພະເຈົ້າ ເວົ້າເຮັດທ່າທີ່ຊື່ງແບບບໍ່ຮູ້ຫຍັງຫມົດ.

- ບໍ່ແມ່ນເດັກນ້ອຍພວກເຈົ້າຊັ້ນຫວະ? ກ່ອນພວກເຈົ້າຊິມາຢູ່ ຫນີ ບໍ່ເຄີຍມີເລື່ອງແບບນີ້ເລີຍ.

ຈາກນີ້ຜູ້ຖືກໂຈລະກຳກໍເລີ່ມນັບນິ້ວມືຈາລະໄນເຫດການທີ່ເກີດ ຂຶ້ນ:

- ມື້ວານນີ້, ຕອນກາງຄືນຫັ້ນ ກະມີຄົນໄປດູດເອົານ້ຳນິມຢູ່ ບ້ານເກົ່າ ມິຣິດນິດເຊັນໂກ, ແລະມື້ກ່ອນ ຫມ່ອຍກະແຈເຮືອນ ສະເຕປານ ແວກໂຄລາ ຖືກຕັດ, ແລ້ວມື້ວັນເສົາແລ້ວ ໄກ່ເກົ້າເກຣ ຊານີ ເປໂຕຣ ກະເສຍໄປສອງໂຕແລ້ວ...ມື້ນັ້ນອີກ...ມື້ກ່ອນໆພຸ້ນ... ປ້າສະໂຕປີນາ, ລາວເປັນແມ່ຫມ້າຍດອກ...ເຈົ້າຮູ້ບໍ່ວ່າ ຫົວນ້ຳ

ນົມຂອງລາວຕັ້ງ ๔ ເຢືອກບັກໃຫຍ່ ລາວກຸມວ່າຊິເອົາໄປຂາຍຕະ
ຫລາດໃນຕອນເຊົ້າ ພໍລາວລົງໄປຮອດຫ້ອງໃຕ້ດິນ...ຫນ້າດູຕົນ
ແທ້ໆ... ເປັນແນວໃດ...ຫ້ອນ້ຳນົມລາວເປື້ອນເຮ່ຍຮອຍຢູ່ເຕັມ
ຫ້ອງ, ແລ້ວຢູ່ເຮືອນ ວາຊີລີ ມິດເຊັນໂກ, ຢູ່ເຮືອນ ຢາກົບ
ແວກໂຄລາ ແລ້ວຢູ່ເຮືອນບັກອອງອີກ...ຫມໍຍງດຊີປອກ ມິດເຊັນ
ໂກ...

-ທ້ງຫມິດນີ້ ເຈ້ົາມີພະຍານຫລັກຖານບໍ່ລະ?

-ພະຍານຫລັກຖານຫຍັງອີກ? ຂ້ອຍມາຫາເຈ້ົາກໍຍ້ອນວ່າ
ຂ້ອຍເຫັນຄົນ ແລ່ນມາທາງນີ້. ແລ້ວຊິແມ່ນໃຜຊັ້ນນ໋ະ? ເວລາ
ພວກເຂົາໄປ ແຕຣບແກ ຫັ້ນເກາະ ພວກເດັກນ້ອຍຂອງເຈ້ົາເຮັດ
ມືຍາວກວາດເອົາທຸກຢ່າງ!

ໃນເວລານັ້ນ ຂ້າພະເຈ້ົາເຫັນວ່າເຫດການມັນບໍ່ຕະຫລົກເລີຍ,
ຂ້າພະເຈ້ົາຮູ້ສຶກເສຍໃຈເສົ້າໃຈນໍາພວກຊາວບ້ານທ້ງຄົນເອງກໍຮູ້ສຶກ
ໂກດແຄ້ນອົດກກ້ງວົນນໍາ ທີ່ຄົນເອງໄຮ້ພະລ້ງແຮງຕໍ່ສູ້ກັບສິ່ງນີ້.
ເວລາທີ່ຂ້າພະເຈ້ົາບໍ່ຮູ້ຫຍ້ງກ່ຽວກັບເຫດການເຫລ່ົານັ້ນ ຂ້າພະ
ເຈ້ົາກໍຍ້ງຢູ່ຍາກອຶດອັດໃຈຢູ່ແລ້ວເພາະຂ້າພະເຈ້ົາຄຶດເດົ່ໄປເອງແບບ
ຕ່າງໆນາໆ. ນອກຈາກນີ້ ຂ້າພະເຈ້ົາຍ້ງເປັນຄົນມີປະສາດສະດຸ້ງໄວ
ຍ້ອນເຫດການທີ່ເກີດຂຶ້ນໃນຍາມຫນາວ.

ຢູ່ໃນນິຄົມ, ເຄ່ົາຮູບນອກແລ້ວທຸກຢ່າງຄືວ່າຮງບຮ້ອຍເປັນປົກ
ກະຕິດີ. ໃນຕອນກາງເວັນ ພວກເດັກນ້ອຍອອກແຮງງານ ແລະ
ຮງນຫນ້ງສື, ຕອນຄ່ໍາພວກເຂົາພັກຜ່ອນຢອກໄຍກັນຫລ້ົນ ແລ້ວ
ກໍໄປນອນເພື່ອຈະໄດ້ຕື່ນຂຶ້ນມາຢ່າງສົດຊື່ນແຈ່ມໃສໃນເຊ້ົາມ້ືໃຫມ່.

ແຕ່ມັນແມ່ນໃນຕອນກາງຄືນນີ້ເອງ ທີ່ເກີດມີການໂຈລະກຳຂຶ້ນຢູ່ໃນ
ບ້ານປະຊາຊົນ. ພວກເດັກນ້ອຍຮຸ່ນໃຫຍ່ຟັງຄວາມຮ້າຍດ່າຕັກ
ເຕືອນຂອງຂ້າພະເຈົ້າຢ່າງມີຄຸນຍອມຈຳນົນງ່າຍໆ, ການຕໍ່ວ່າຕໍ່
ຂານຂອງໃຫບ້ານຜ່ອນເບົາລົງແດ່ ແຕ່ບໍ່ຄົນຄວາມເປັນປໍລະປັກ
ຂອງພວກເຂົາຕໍ່ນິຄົນກໍພຸ່ງແຮງແຕກລະເບີດອອກ.

ສະຖານະການຂອງພວກເຮົາສັບສົນຂຶ້ນຕື່ມ ເມື່ອເກີດມີການລັດ
ປຸ້ນຈີ້ປະຊາຊົນຢູ່ຕາມຖະຫນົນໃຫຍ່. ບັດນີ້ການກະທຳດັ່ງກ່າວ ຫັນ
ປ່ຽນມາມີລັກສະນະໃຫມ່ແລ້ວ. ພວກນັກປຸ້ນ ບໍ່ສົນໃຈນຳເງິນຄຳຊັບ
ສົນຂອງໃຫບ້ານພໍເທົ່າໃດດອກ, ພວກເຂົາປຸ້ນເອົາແຕ່ພຽງອາຫານ
ການກິນຈຳນວນຫນ້ອຍຫນຶ່ງເທົ່ານັ້ນ. ທຳອິດຂ້າພະເຈົ້າຄຶດວ່າ
ນິຄົນບໍ່ມີສ່ວນກ່ຽວພັນກັບເລື່ອງຫມູ່ນີ້ຈັກຫນ້ອຍ ແຕ່ເມື່ອຂ້າພະເຈົ້າ
ໄປໃກ້ຊິດໂອ້ລົມກັບໃຫບ້ານ ພວກເຂົາເຈົ້າຊ້ຳເວົ້າຢ່າງກ້າກັນຂ້ານ
ວ່າ:

-ບໍ່ເດ໊, ມັນຕ້ັງແມ່ນພວກເດັກນ້ອຍຂອງເຈົ້າຫັ້ນແລ້ວ, ຄອງ
ເບິ່ງເດ໊ ໃຫ້ພວກເຮົາຈັບໄດ້ຄັກໆຈັກບັກກ່ອນ ຊິເອົາມັນຄັກໆ
ແລ້ວເຈົ້າຫາກຊິເຫັນດອກ.

ພວກເດັກນ້ອຍພາກັນປະຕິເສດແຂງຂັນ ເພື່ອໃຫ້ຂ້າພະເຈົ້າ
ອຸ່ນໃຈ.

-ໂອ້ຍ ພວກລາວນາເຂົາຫາຄວາມໃສ່ດອກ! ເອ໊ ຄັນວ່າມີຜູ້
ໃດຜູ້ຫນຶ່ງໃຫເຮົາໄປຫລອຍເຕ໋ອງໃນຫ້ອງໃຕ້ດິນຫັ້ນແທ້ ກໍຄືຢູ່...
ແນວຫມູ່ນີ້... ມັນທຳມະດາດອກ... ແຕ່ອັນໄປປຸ້ນຈີ້ຄົນຕາມຖະ
ຫນົນນີ້... ບໍ່ມີທາງດອກ!

ຂ້າພະເຈົ້າແນມເຫັນຄວາມຈົງໃຈໃນຕົວພວກເຂົາ ທີ່ເຊື່ອຫມັ້ນ ວ່າ ບໍ່ມີຜູ້ໃດເລີຍໃນຫມູ່ພວກເຂົາອອກຫາກິນຢູ່ຕາມຖະຫນົນໃຫຍ່ ແລະຂ້າພະເຈົ້າກໍແນມເຫັນຄືກັນວ່າວິທີການປຸ້ນຈີ້ແນວນີ້ ຄົງບໍ່ເປັນ ທີ່ຊື່ນຊົມສໍາລັບສະມາຊິກນິຄົມຮຸ່ນເກົ່ານັ້ນດອກ. ຄວາມນຶກຄິດດັ່ງ ກ່າວຫລຸດຜ່ອນຄວາມເຄັ່ງຕຶງທາງປະສາດຂອງຂ້າພະເຈົ້າ ລົງແດ່ ຈອບຈົນເຖິງ ເວລາທີ່ຂ່າວຊ່າວລືດັງຂຶ້ນອີກຄື ເມື່ອຂ້າພະເຈົ້າໄດ້ພົບ ພໍ້ກັບອໍານາດການປົກຄອງບ້ານໃນຄັ້ງຕໍ່ມາ.

ແລະແລ້ວ ບໍ່ດົນບໍ່ນານຫຍັງເລີຍ, ແລງມື້ຫນຶ່ງຕໍາຫລວດຫມູ່ ຫນຶ່ງກໍມາຫ້ອມລ້ອມນິຄົມຂອງພວກເຮົາ, ກະຈາຍຜູ້ຄົນອອກຍາມ ຕາມຫໍພັກເປັນໄລຍະ ແລະລົງມືຄົ້ນໄປທົ່ວທຸກບ່ອນ. ຂ້າພະເຈົ້າ ເອງກໍຖືກກັກຂັງຢູ່ໃນຫ້ອງການ ແລະກໍແນ່ນອນເຫດຜົນອັນນີ້ ເອງ ທີ່ເຮັດໃຫ້ປະຕິບັດການຂອງຝ່າຍມີສິດອໍານາດ ພ່າຍພັ້ງໄປ. ພວກເດັກນ້ອຍຕ້ອນຮັບພວກພົນຕໍາຫລວດດ້ວຍກໍາປັ້ນ ແລ້ວໂດດ ຫນີທາງປ່ອງຢ້ຽມ ທ່າມກາງຄວາມມືດຄໍ່ານັ້ນ. ກ້ອນດິນຈີ່ກໍປິວ ຟາດອອກມາ, ສ່ວນວ່າຢູ່ທາງແຈເດີ່ນຟຸ້ນ ມີການຕໍ່ສູ້ຊະນິດໂຕຕໍ່ ໂຕກັນ. ເດັກນ້ອຍຫມູ່ຫນຶ່ງໂດດຂຶ້ນມ້າຂອງພວກຕໍາຫລວດທີ່ລ່ານ ປະໄວ້ຕໍ່ຫນ້າຄອກມ້າ ແລ້ວຄວບຂີ່ຫາຍໂຕລັບເຂົ້າໄປໃນປ່າ. ຂ້າ ພະເຈົ້າໄດ້ຍິນສຽງປ້ອຍດ່າແຮງໆບາດຫນຶ່ງ ຫລັງຈາກນັ້ນ ການຮາບ ນິບ ກໍບຸກເຂົ້າມາຮອດຫ້ອງການຂອງຂ້າພະເຈົ້າທັງຮ້ອງວ່າ:

-ມາໄວ... ບໍ່ຊັ້ນເກີດເລື່ອງໃຫຍ່ຄັກໆຕ່ອ!

ຂ້າພະເຈົ້າໂດດອອກໄປກາງເດີ່ນ, ໃນທັນທີທັນໃດນັ້ນ ພວກ

ເດັກນ້ອຍທີ່ກຳລັງເລືອກຂຶ້ນຫນ້າກໍຫຸ້ມລ້ອມອ້ອມຂ້າພະເຈົ້າໄວ້. ຊາໂດຮອບ ຮ້ອງກ້າກໆຄືຄົນປ່ວງບ້າວ່າ:

-ມັນຊິເປັນແນວໃດກະເປັນຊະເວີ້ຍ! ໃຫ້ພວກເຂົາຈັບຂ້ອຍໄປສາ... ຂ້ອຍເບື່ອຫນ່າຍອີ່ນພໍແຮງແລ້ວເດີ້! ຂ້ອຍເປັນນັກໂທດຊັ້ນຫວາ? ຊັ້ນກະເຊີນຈັບແມ້! ແລ້ວເປັນຫຍັງມາຄົ້ນມາກວດກັນແນວນີ້? ພວກເຂົາມີສິດຫຍັງມາຄົ້ນມາເບິ່ງແບບນີ້?...

ນາຍຕຳຫລວດຫົວຫນ້າຫມູ່ເອງກໍຍ່ານຕັບສັ່ນໄປຄືກັນ ແຕ່ກໍໄດ້ພະຍາຍາມບໍ່ຜ່ອນສຽງລົງເມື່ອອອກຄຳສັ່ງວ່າ:

-ສັ່ງໃຫ້ເດັກນ້ອຍເຈົ້າກັບຄືນຫໍພັກ ຢືນຢູ່ຂ້າງຫຼງຂອງໃຜຂອງລາວຫຼງນີ້!

-ພວກເຈົ້າໃຊ້ສິດອັນໃດມາກວດຄົ້ນແນວນີ້? ຂ້າພະເຈົ້າຖາມລາວຄືນ.

-ບໍ່ແມ່ນທຸລະຂອງເຈົ້າ, ຂ້ອຍມີຄຳສັ່ງ.

-ເຊີນອອກຈາກນີ້ຄືນຫຼງນີ້!

-ເຈົ້າຫມາຍຄວາມວ່າແນວໃດ?

-ຖ້າບໍ່ມີຄຳສັ່ງອະນຸຍາດຈາກຜູ້ອຳນວຍການ ພະແນກສຶກສາປະຊາຊົນ ຂ້ອຍຈະບໍ່ຍອມໃຫ້ມີການກວດຄົ້ນເດັດຂາດ, ຂ້ອຍຈະໃຊ້ກຳລັງຂັດຂວາງເອງ.

-ລະວັງ ເພິ່ນຊິໄປກວດຄົ້ນເຈົ້າຄືນຫັ້ນທ້ອນ! ມີສຽງເດັກນ້ອຍຜູ້ຫນຶ່ງຮ້ອງຂຶ້ນ, ແຕ່ຂ້າພະເຈົ້າຮ້າຍໄປວ່າ:

-ນຶດ!

-ດີລະ! ນາຍຕຳຫລວດເວົ້າຂຶ້ນແບບຂູ່ເຂັ່ນ, ບາດແລ້ວເຈົ້າຊິໄດ້ໂອ້ອ່ວດອກ!

ເຂົາເຈົ້າເຕົ້າໂຮມພ້ອມກັນມ້ອງ, ແລະດ້ວຍຄວາມຊ່ວຍເຫລືອຂອງພວກເດັກນ້ອຍ ເຂົາຈຶ່ງສາມາດຊອກຫາມ້າຂອງຕົນຄືນມາໄດ້ ແລ້ວກໍພາກັນກອຍກັບເມືອ ທ່າມກາງສຽງຮ້ອງອວຍພອນໃຫ້ໄປດີມີໂຊກແບບສຽງສີຂອງພວກເດັກນ້ອຍ.

ຢູ່ໃນເມືອງ ຂ້າພະເຈົ້າສາມາດເຮັດໃຫ້ຫົວໜ້າຊັ້ນສູງຜູ້ທີ່ອອກຄຳສັ່ງໃຫ້ທຳການກວດຄົ້ນນັ້ນກຶກເອົ້ນໄປຕັກເຕືອນ ແຕ່ຫລັງຈາກເຫດການອັນນີ້ແລ້ວ ສະຖານະການຈຳຍ່ຳຮ້າຍແຮງຂຶ້ນຢ່າງອ່ອງໄອໜ້າເຫລືອເຊື່ອ. ພວກຊາວບ້ານມາຫາຂ້າພະເຈົ້າ ດ້ວຍຄວາມໂກດແຄ້ນ, ພວກເຂົານາບຂູ່ແລະຮ້ອງໃສ່ໜ້າຂ້າພະເຈົ້າວ່າ:

-ນ້ົ ອານນ້ົ, ພວກເດັກນ້ອຍຂອງເຈົ້າປຸ້ນເມຍເກົ້ຍາອະຕຸກຍາດເອົານ້ຳມັນເບີກັບນ້ຳມັນຫມູ... ຢູ່ກະຫນົນໃຫຍ່!

-ຂ້ົ ຕ້ົ ອະ!

-ບ່ໍເດ້ົ... ແມ່ນພວກເຂົາແທ້ໆ, ພຽງແຕ່ວ່າມັນເອົາຫນວກປົກໜ້າ ເພື່ອບ່ໍໃຫ້ມ້ົ ຄົນຈ່ົ ມັນໄດ້.

-ແລ້ວພວກເຂົາມ້ົ ນຳກັນຈັກຄົນລະ?

-ຕາມແມ່ເກ້ົ ານັ້ນເວ້ົ ามีผู้ดงอ. ແມ່ນເດັກນ້ອຍເຈ້ົ ານ້ົ ລະ... ມັນໃສ່ເສ້ົ ອໃຫຍ່ແບບພວກເຂົາໃສ່ຢູ່ຫນ້ົ !

-ເຈ້ົ າເວ້ົ າຫລ້ົ ນຕ້ົ , ພວກເດັກນ້ອຍບ່ໍເຮັດແບບນ້ົ ດອກ.

ພວກຊາວບ້ານຈາກໄປແລ້ວ, ຄວາມງຽບສະຫງັດຫນັກໜ່ວງຢ່າງຫນ້ົ ງຄອບງຳບັນຍາກາດແລ້ວໃນທັນໃດນັ້ນ ภาธาบานิบ ก็ เวำ้ ขึ้นอ่า:

-ຂ໊ຶ້ຕ໊ອະ! ຂ້ອຍຂໍບອກເຈົ້າວ່າພວກເຂົາຂ໊ຶ້ຕ໊ອະ, ພວກເຮົາຈະຕ້ອງສຶບເລ໊ື່ອງນ໊ີ້ໃຫ້ໄດ້.

ເທ໊ົ່ງນານມາແລ້ວ ທ໊ີ່ພວກເດັກນ້ອຍເອງກໍເລ໊ີ່ມມ໊ີຄວາມອ໊ຶດົກ ກ້ັງວົນຄ໊ັບຂ້ັ້ງພະເຈ໊ົ້າ ແລະນັບແຕ່ນ໊ັ້ນມາ ການລ໊ັກຫລ໊ອຍຕາມ ຫ້ອງໃຕ໊ດິນກໍ໊ຄ໊ືວ່າມ໊ືດງ່ຽບໄປ. ພ໊ໍ ຕ໊ົກຄ່ໍ, ນ໊ິຄົມຫ້ັ້ງຫມ໊ົດປ໊ົ່ງກ໊ົດວ່າ ແຂ້ງກະດ້ັ້ງໄປດ້ວຍການຄ໊ອ້ງຄ໊ອຍເຫ໊ດການ ອ້ັນບ່ໍ່ຄ໊ົ່ງດ໊ົ່ບ່ໍ່ຝ້ັນຢ່ ້ ງ ຫ໊ນ໊ຶ່ງທ໊ີ່ເປ້ັນສ໊ິ່ງໃຫມ່ອ່ ້ ງມ ຫ້ ້ ງມ ໂຫດ ແລະຫນ້ ້ າອ້ ັ ບອ ້ າຍ. ກ ້ າ ຣ ບ ້ າ ນ ິ ບ, ຊ ້ າ ໂ ດ ຣ ອ ບ, ບ ູ ຣ ູ ນ ພ ້ າ ກ ັ ນ ເ ລ ້ າ ະ ລ ່ ງ ບ ໄ ປ ມ ້ າ ລ ະ ຫ ວ ່ ້ າ ງ ຫ ໍ ້ ພ ັ ກ, ພ ວ ກ ເ ຂ ົ ້ າ ຊ ອ ກ ຄ ົ ້ ນ ຕ ້ າ ມ ຈ ອ ກ ແ ຈ ບ ່ ອ ນ ອ ັ ບ ມ ຶ ດ ທ ຸ ກ ບ ່ ອ ນ, ຄ ອ ນ ໆ ກ ໍ ຫ ້ າ ຍ ຕ ິ ອ ເ ຂ ົ ້ ້ າ ໄ ປ ໃ ນ ປ ່ ້ າ. ເ ວ ລ ້ ້ ັ ນ ຂ ້ ້ ັ ້ ງ ພ ະ ເ ຈ ົ ້ ້ ້ ັ ້ ງ ຮ ູ ້ ສ ຶ ກ ວ ່ ້ ້ ້ ັ ້ ງ ເ ສ ້ ັ ້ ນ ປ ະ ສ າ ດ ເ ຕ ົ ້ ່ ງ ຕ ໊ ົ ້ ງ ຈ ອ ນ ຈ ະ ຂ າ ດ ແ ບ ບ ບ ໍ ່ ເ ຄ ີ ຍ ຮ ູ ້ ສ ຶ ກ ມ ້ ້ ັ ້ ງ ກ ່ ້ ້ ັ ້ ງ ໃ ນ ຊ ີ ວ ິ ດ.

ແ ລ ະ ແ ລ ວ...

ແ ລ ້ ້ ັ ້ ງ ມ ໊ ົ ້ ້ ັ ້ ນ ຫ ນ ໍ ້ ປ ະ ຕ ູ ຫ ້ ອ ້ ້ ັ ້ ງ ກ ານ ຂ ອ ້ ້ ັ ້ ງ ຂ ້ ້ ັ ້ ງ ພ ະ ເ ຈ ົ ້ ້ ້ ັ ້ ງ ກ ໍ ໄ ຂ ພ ິ ອ ະ ອ ອ ກ ໃ ສ ່ ຫ ນ ້ ້ ັ ້ ງ : ປ ຣ ິ ໂ ກ ດ ໂ ກ ກ ໊ ົ ຖ ກ ພ ວ ກ ຫ ມ ູ ່ ເ ດ ັ ກ ນ ້ ອ ຍ ໂ ຍ ນ ເ ຂ ົ ້ ້ ້ ັ ້ ງ ມ ້ ້ ັ ້ ງ ຫ ມ ູ ບ ອ ້ ້ ັ ້ ງ ຟ ້ ້ ັ ້ ງ ຢ ູ ່ ໃ ນ ກ ້ ້ ັ ້ ງ ຫ ້ ອ ້ ້ ັ ້ ງ. ກ ້ ້ ັ ້ ງ ຣ ້ ້ ັ ້ ງ ບ ້ ້ ັ ້ ງ ນ ິ ບ ຫ ຍ ຸ ນ ຄ ໍ ເ ສ ໊ ື ອ ມ ້ ້ ັ ້ ງ ມ ້ ້ ັ ້ ງ ມ ້ ້ ັ ້ ງ ແ ລ ້ ້ ັ ້ ງ ຊ ຸ ກ ມ ້ ້ ັ ້ ງ ໃ ສ ່ ໂ ຕ ະ ຂ ອ ້ ້ ັ ້ ງ ຂ ້ ້ ັ ້ ງ ພ ະ ເ ຈ ົ ້ ້ ້ ັ ້ ງ ຫ ນ ິ ດ ແ ຮ ງ.

-ຫ ລ ້ ້ ັ ້ ນ ນ ິ ດ ອ ີ ກ ແ ລ ້ ້ ັ ້ ນ ຊ ້ ້ ັ ້ ນ ຫ ວ ະ? ຂ ້ ້ ັ ້ ງ ພ ະ ເ ຈ ົ ້ ້ ້ ັ ້ ງ ກ ້ ້ ັ ້ ງ ມ ້ ້ ັ ້ ນ ຢ ່ ້ ້ ັ ້ ງ ເ ມ ໊ ື ອ ຍ ໃ ນ ຫ ົ ວ ໃ ຈ.

-ນ ິ ດ ອ ໊ ື ຫ ຍ ັ ງ? ມ ັ ນ ແ ມ ່ ນ ໂ ຕ ກ ານ ກ ໍ ່ ເ ລ ໊ ື ອ ງ ຢ ູ ່ ກ ະ ຫ ນ ິ ນ ໃ ຫ ຍ ່ ຫ ້ ັ ້ ນ ຕ ໊ ິ!

ພ ໍ ປ ານ ສ າ ຍ ຟ ້ ້ ້ ັ ້ ງ ຟ ້ ້ ັ ້ ງ ດ ວ ິ ງ ໃ ສ ່ ກ ້ ້ ັ ້ ງ ໂ ຕ, ຂ ້ ້ ັ ້ ງ ພ ະ ເ ຈ ົ ້ ້ ້ ັ ້ ງ ກ ້ ້ ັ ້ ງ ມ ປ ຣ ິ ໂ ກ ດ

ໂກ ທີ່ກາຍເປັນຄົນປາກກົກດ້ວຍຄວາມຢ້ານສັ່ນທິດໆ ແບບກົນຈັກ ວ່າ:

-ແມ່ນແທ້ຫວະ?

-ແມ່ນແລ້ວ! ມັນຕອບຄ່ອຍໆເກືອບບໍ່ໄດ້ຍິນ, ແສງຕາຕົກຕ່ຳ.

ພຽງສັ່ງວ່ານທິດຽວເທົ່ານັ້ນ ຄວາມຈົບຫາຍວາຍວອດ ກໍເກີດຂຶ້ນ, ປືນສັ້ນກະບອກຫນຶ່ງຕົກມາຢູ່ໃນກຳມືຂ້າພະເຈົ້າແລ້ວ.

-ພວກເຜດເອີ້ຍ! ກູຂໍລາສູແລ້ວ!

ແຕ່ຂ້າພະເຈົ້າ ບໍ່ທັນມີເວລາຍົກປາຍປືນຈ້ຳສະຫມອງຕົນເອງດອກ ເດັກນ້ອຍຫມູ່ຫນຶ່ງກໍປຸ້ມມາໃສ່ ເບິ່ງພວກເຂົາທັງຮ້ອງທັງໄຫ້.

ເມື່ອຮູ້ເມື່ອຄິດຄືນມານັ້ນ ຂ້າພະເຈົ້າເຫັນ ເອີກາເຕີຣີນາ ກຣີ ກໍເຮັບນາ, ຊາໂດຣອບ ແລະບູຣູນ ຫຸ້ມລ້ອມຢູ່. ຂ້າພະເຈົ້າເອງ ນອນຫງາຍເຈີບເບີບ ຢູ່ເທິງພື້ນເຮືອນ ລະຫວ່າງໂຕະແລະຝາ, ຕົນຕິວປຽກນ້ຳຈົ້ນເຍັນໄປຫມົດ. ຊາໂດຣອບ ໂຈມຫົວຂອງຂ້າພະເຈົ້າຂຶ້ນ, ຫມໍເງີຍຫນ້າເບິ່ງ ເອີກາເຕີຣີນາ ກຣີກໍເຮັບນາແລ້ວ ບອກນາງວ່າ:

-ເຈົ້າໄປພຸ້ນສາ... ບໍ່ຊັ້ນເຂົາຂ້າ... ຫມໍປຣີໂກດໂກ ຄັກໆ ຕ່ວາ!

ພຽງວ່ານທິດຽວເທົ່ານັ້ນ ຂ້າພະເຈົ້າອອກມາຮອດເດີ່ນ ແລະ ຈ່ອຍດຶງເອົາ ປຣີໂກດໂກ ເຊິ່ງສະຫລົບເຫມືອດເລືອດອາບໂຕ ອອກຈາກເງື້ອມມືພວກເດັກນ້ອຍທັນເວລາພໍດີ.

ບົດທີ ๑๙

ການຫລົ້ນ "ຫມາກຈໍ່ເດ້ອງ"

ເວລານັ້ນແມ່ນຕົ້ນລະດູຮ້ອນປີ ๑๙๘๘. ພວກເຮົາອັດປາກມິດ ອ້ມສົ້ມ ຕໍ່ໂທດກໍາຂອງ ປຣິໂກດໂກ. ຫມູ່ພວກຂອງມັນຈັດການກັບ ມັນຈົນອິ່ລາກອິ່ເລືອ ຈົນວ່າມັນຕ້ອງລົ້ມຫມອນນອນເສື່ອຫລາຍມື້ ແລະພວກເຮົາ ກໍອົດທົນບໍ່ບິບບັງຄັບສົ້ສິນເລື່ອງໃດໆນໍາມັນຕື່ມອີກ. ໂດຍບັງເອີນ ຂ້າພະເຈົ້າໄດ້ຮູ້ວ່າການອອກເຮັດວຽກຂອງມັນນັ້ນບໍ່ມີ ລັກສະນະພິເສດອັນໃດເລີຍ ຄືມັນບໍ່ມີອາວຸດຊະນິດໃດຢູ່ໃນຕົວຈໍ້າ.

ເວ້ົາຢ່າງໃດກໍດີ ປຣິໂກດໂກ ແມ່ນຈອມໂຈນຄົນຫນຶ່ງແທ້ໆ. ຄວາມອັບອາຍຂາຍຫນ້າທ້ງຫມົດ ທີ່ເກີດຂຶ້ນພາຍໃນຫ້ອງການຂ້າ ພະເຈົ້າກັບການຜະຈົນໄພຂອງມັນເອງ ບໍ່ໄດ້ເຮັດໃຫ້ມັນສະເທືອນ ອາລົມພໍຫນ້ອຍ ແລະໃນການະຕໍ່ມາ ມັນກໍເຮັດໃຫ້ນິຄົມຂອງພວກ ເຮົາຕົກຢູ່ໃນພາວະຫມອງມົວຫລາຍຄັ້ງ. ໃນຂະນະດຽວກັນ ມັນຈໍ້າ ຊໍ້ສັດຕໍ່ນິຄົມຕາມແບບວິທີຂອງມັນ ແລະແນ່ນອນວ່າຈະບໍ່ມີສັດຕູຜູ້ ໃດຜູ້ຫນຶ່ງຂອງນິຄົມ, ຈະບໍ່ຖືກຂວານຫລ໊ັກ້ອນຫນັກໆຂອງມັນ ຟາດຫົວໃນມື້ໃດມື້ຫນຶ່ງ. ມັນເປັນຄົນຄັບແຄບພິ໊ກ ຍາມໃດກໍຕົກ ຢູ່ພາຍໃຕ້ອໍານາດຂອງຄວາມປະທັບໃຈຢ່າງໄວວາປຸບປັບກັບແນວຄິດ ອັນທໍາອິດທີ່ແລ່ນເຂ້ົາມາຄອບຄອງມັນສະຫມອງອັນໂງ້ຈ່ໍ ຂອງ ມັນ. ແຕ່ວ່າເມື່ອເວລາເຂ້ົາວຽກເຂ້ົາງານຈໍ້າພັດບໍ່ມີໃຜລົ້ນມັນ. ວຽກ ງານອັນຫນັກຫນ່ວງບໍ່ສາມາດຂັດຂວາງຄວາມວ່ອງໄວຂອງມັນເລີຍ, ມັນສາມາດໃຊ້ຂວານ ແລະຄ້ອນຕີຢ່າງຊໍານິຊໍານານ ເກ໊ງແມ່ນວ່າ

ມັນຈະໃຊ້ເຄື່ອງມືເຫລົ່ານີ້ຜ່າດລີງໃສ່ໃນອົງກໃນງ່ານ ແບບດຽວກັນ ກັບຜ່າດລີງໃສ່ຫົວຜູ້ໃດຜູ້ຫນຶ່ງ.

ຫລັງຈາກເຫດການຮ້າຍໆ ທີ່ພວກເຮົາເວົ້າເຖິງຜ່ານໄປແລ້ວ ຄວາມຮູ້ສຶກເປັນປໍລະປັກຮຸນແຮງຢ່າງຫນຶ່ງ ທີ່ເດັກນ້ອຍນິຄົມມີຕໍ່ ພວກຊາວນາກໍເປີດເຜີຍອອກ, ພວກເຂົາບໍ່ສາມາດໃຫ້ອະໄພແກ່ ພວກນີ້ຍ້ອນເຫັນວ່າພວກຊາວນາ ເປັນສາເຫດກໍ່ຄວາມຫຍຸ້ງຍາກ ລໍາບາກໃຈໃຫ້ແກ່ພວກເຮົາ. ຂ້າພະເຈົ້າເອງແນມເຫັນຢູ່ວ່າການທີ່ ພວກເດັກນ້ອຍອຶດທົນ ບໍ່ເຮັດຫຍັງຮຸນແຮງກັບພວກຊາວນານັ້ນ ມັນກໍແມ່ນຍ້ອນວ່າພວກເຂົາເຫັນແກ່ຫນ້າຂ້າພະເຈົ້ານັ້ນເອງ.

ຕັ້ງແຕ່ໃດໆມາ ພວກເດັກນ້ອຍບໍ່ເຫັນວ່າ ການໂອ້ລົມຕ່າງໆ ຂອງຂ້າພະເຈົ້າກັບພວກຄູສອນກ່ຽວກັບຊົນຊັ້ນຊາວນາ ແລະການ ສັ່ງສອນໃຫ້ເຄົາລົບນັບຖືວຽກງ່ານຂອງພວກເຂົານີ້ ມີຄວາມສໍາຄັນ ສົມຄວນ ທັງບໍ່ຖືວ່າມັນເປັນຄໍາສອນຂອງຜູ້ມີການສຶກສາ ແລະສະ ຫລາດກ່ວາພວກເຂົາຈັກເທື່ອ. ຕາມທັດສະນະຂອງພວກເຂົານັ້ນ ພວກເຮົາ ເປັນຄົນປະເພດຫນຶ່ງຄ້າຍຄືຄົນຈໍາພວກປັນຍາຊົນໃນ ເມືອງ, ຈັ່ງຊັ້ນໃນສາຍຕາຂອງພວກເຂົາ ພວກເຮົາຈຶ່ງບໍ່ສາມາດເຂົ້າ ໃຈວ່າຊົນຊັ້ນຊາວນານັ້ນເປັນຫນ້າຂົ້ງດກງດຊັ່ງພໍພຽງໃດ.

-ພວກເຈົ້າບໍ່ຮູ້ຈັກພວກເຂົາດີເທົ່າພວກເຮົາດອກ, ພວກເຮົາ ຮູ້ຮອດແກ່ນກະດູກດໍາຂອງພວກເຂົາພຸ້ນບ່າວ່າເປັນແນວໃດ, ຍ້ອນ ເຂົ້າຈຶ່ເຄີ່ງກ້ອນພວກເຂົາສາມາດຂ້າຄົນໄດ້ ລອງຂໍຫຍັງນໍາພວກເຂົາ ຈັກຫນ້ອຍແມ້... ພວກເຂົາບໍ່ໄດ້ວ່າຊິໃຫ້ທານຜູ້ອຶດຜູ້ຍາກເກາະ ພວກເຂົາເຫັນວ່າປ່ອຍໃຫ້ຂອງກິນເຫລືອບູດເນົ່າກົ້ມຢູ່ໃນຕູ້ດີກ່ວາ!

-ພວກເຮົາແມ່ນໂຈນນັກປຸ້ນ... ແມ່ນແທ້! ແຕ່ພວກເຮົາ ຍອມຮັບຮູ້ແລ້ວວ່າ ໄດ້ເຮັດແນວບໍ່ດີແລະເພິ່ນກໍອະໄພໃຫ້ພວກ ເຮົາ... ອັນນີ້ພວກເຮົາຮູ້ດີ ແຕ່ອັນທີ່ພວກເຂົາເຮັດຫັ້ນດີ ພວກ ເຂົາບໍ່ຕ້ອງການຜູ້ໃດຫນຶ່ງ, ພະເຈົ້າຊາກໍຊ່ວ ອຳນາດໃຊ້ງດກໍຊ່ວ ຄືກັນ ພວກເຂົາເຫັນວ່າມີແຕ່ຜູ້ບໍ່ຮຸ່ງກຮ້ອງເອົາຫຍັງນຳເຂົາເທົ່ານັ້ນ ທີ່ເປັນຄົນດີ ຜູ້ທີ່ມອບທຸກຢ່າງໃຫ້ພວກເຂົາລ້າງຫັ້ນກໍ... ນີ້ລະ ພວກຊາວນາຂີ້ດຽດ!

-ເຮົາຫວະໄດ້ກິ່ນພວກເຂົາກໍຊິຕາຍແລ້ວນ່າ ອັນພວກຊາວນາ ຮ່ານີ້ເບາະ ເຫັນລະແມ່ນເຈັບແກ່ນຕາເອົາໂລດ ຢາກຈັດການພວກ ເຂົາຫນຶດທຸກຄົນເລີຍລະ! -ບູຮູນ ເຊິ່ງເປັນຊົນຊັ້ນຊາວເມືອງຕັ້ງ ເດີມເວົ້າຂຶ້ນ.

ຢູ່ຕະຫລາດ ບູຮູນ ມັກຢອກກວນພວກຊາວນາຮັ່ງຢູ່ສະເຫມີ. ມັນແວະເຂົ້າໄປຫາຊາວຊົນນະບົດຜູ້ກຳລັງຢືນຢູ່ຂ້າງໆກວ່ງນ ແລະ ແນມເບິ່ງຄວາມສັບສົນຂອງຜູ້ຄົນຊາວເມືອງອ້ອມໆໂຕດ້ວຍທ່າທີບໍ່ ຍາກພໍໃຈ. ບູຮູນ ຈະຖາມຂຶ້ນກ້ຽງໆວ່າ:

-ເຮ້ຍ ເຈົ້າກໍເປັນໂຈນຫວະ?

ຜູ້ຖືກຖາມຕົກຂະມ່າ ເກົ້ໄປຄາວຫນຶ່ງ.

-ເຮ້ຍ!

-ແມ່ນແລ້ວ... ອ່າເຈົ້າແມ່ນ ມຸຊິກ! ບູຮູນເວົ້າຂຶ້ນທັ້ງຫົວ ແຮງໆ ແລະພ້ອມດຽວນັ້ນ ມັນກໍທຳທ່າຄືວ່າຢາກຄວາມືໄປໃສ່ກ້ຽ ທ່ວ່າງເທ້ງກວ່ງນນັ້ນຢ່າງວ່ອງໄວ:

-ຈັບເຮົາແມ້, ພໍ່ເກົ້າເອ້ຍ!

ຜູ້ກຸກຊູ່ຂ້ອນຈະປ້ອຍດ່າອອກມາລຸດໆເຊິ່ງສອດຄ່ອງກັບທີ່ ບູຮູນ ຄາດຫວັງໄວ້ ມັນພໍອົກພໍໃຈຟັງພໍປານວ່າຄຳເວົ້າປ້ອຍດ່າເຫລົ່ານັ້ນ ແມ່ນສຽງບັນເລງຈາກວິງດົນຕີຊັ້ນສູງ.

ບູຮູນ ເວົ້າກັບຂ້າພະເຈົ້າຢ່າງບໍ່ຈຽມສີບຈຽມປາກວ່າ:

-ຄັນເຈົ້າບໍ່ຢູ່ຫັ້ນແມ້ ພວກຫມູ່ນີ້ມີຫວັງພໍ້ຂອງແຂງຄັກໆຕ່ວາ.

ສາເຫດຕົ້ນຕໍອັນຫນຶ່ງ ທີ່ມີສ່ວນເຮັດໃຫ້ສາຍສຳພັນຂອງພວກເຮົາກັບຊາວນາຮັ່ງ ມີອັນສຸດສ້ວຍລົງຢ່າງນີ້ກໍແມ່ນຍ້ອນວ່ານິຄົມຂອງພວກເຮົາຖືກອ້ອມລ້ອມດ້ວຍເຄຫາຂອງພວກຊາວນາຮັ່ງທຸກໆດ້ານເລີຍ. ບ້ານກົງຊາຣອບກາ ເຊິ່ງມີປະຊາຊົນສ່ວນໃຫຍ່ເປັນຊາວນາທຸກຜູ້ອອກແຮງງານນັ້ນ ຊ້ຳຢູ່ໃກຈາກພວກເຮົາ. ຜູ້ຄົນທີ່ຢູ່ໃກ້ຄຽງກັບພວກເຮົາເປັນຄົນປະເພດ ມູຊິ ກາໂປວິດ, ເອັບເພັນ ຊິໂດໂຣວິດ, ຊ້ຳລ້ວນແຕ່ແມ່ນຊາວນາຮັ່ງ ພວກເຂົາຢູ່ໃນເຄຫາຂອງໃຜຂອງລາວອ່ວຫ່າງກັນ ມີຫລັງຄາແຫນ້ນຫນາ, ຕິວເຮືອນທາສີຂາວຄືຫິມະ, ອ້ອມຮອບເຮືອນ ບໍ່ແມ່ນຮົ້ວທຳມະດາ ແຕ່ແມ່ນກຳແພງກໍ່ຢ່າງແຫນ້ນຫນາ. ພວກເຂົາບໍ່ໃຫ້ໃຜລ່ວງລ້ຳເຂົ້າໃນເຂດແດນເດີ່ນບ້ານແບບງ່າຍໆ ແລະເມື່ອພວກເຂົາມານິຄົມ ພວກເຮົາຊ້ຳຕ້ອງອົດທົນຟັງຄຳຈ່ຽວວ່າກ່ຽວກັບການເກັບພາສີກະສິກຳ ຈົນເຈັບຫູ ຈາກນັ້ນ ກໍແມ່ນຄຳທຳນາຍຄາດຄະເນທີ່ວ່າ ກ້າວຳເນີນນະໂຍບາຍແບບນີ້ຕໍ່ໄປ ລະບອບອຳນາດໂຊວຽດມີຫວັງໄປບໍ່ລອດ. ພວກເຂົາເວົ້າຈ່ຽວແນວນີ້ທັ່ງໆທີ່ວ່າ ພວກເຂົານັ້ນມີນ້ຳອ້ອນງາມສຳລັບທຸລະກອນ, ເມື່ອມີບຸນກໍກິນເຫລົ້າວິດກາຈົນເມົາແປເມົາແປດສ່ວນພວກນາງເມຍ ກໍໄດ້ແຕ່ງເພດໃສ່ກະໂປງໃຫມ່ຜືນງາມ, ກິນ

ນ້ຳນົມຂຸ້ນ ແລະເຂົ້າຫນົມໄສ້ເນີຍ ທາງພວກລູກຊາຍກໍບໍ່ນ້ອຍ ຫນ້າຫາຄູ່ແຂ່ງບໍ່ໄດ້ເລີຍໃນເລື່ອງເຈົ້າຊູ້. ໃນຍາມມືບຸນ ພວກນີ້ໃສ່ເສື້ອນອກຮັດຄີງ ຫມວກເງິບຜ້າກຳມະຍີ່ສີຂຽວຊ້ຳໃຫ່ມ່ອ່ຽມ ເກີບຫນັງຜັດເຫລື້ອມເມ້ົາໆ ຫນັງພົ້ນເຮັດດ້ວຍຢາງດິບ ບໍ່ວ່າຕະຫລອດ ລະດູຫນາວ ແລະລະດູຮ້ອນ.

ພວກເດັກນ້ອຍຮູ້ເຕັມຫົວໃຈວ່າ ຜະລິດຜົນຂອງຊາວນາຮັ່ງຜູ້ຢູ່ໃກ້ໆກັບພວກເຮົາເປັນແນວໃດ ຮູ້ເຖິງສະພາບເຄື່ອງຈັກຫວ່ານ ຫລືເຄື່ອງຈັກກ່ຽວເຂົ້າຂອງພວກເຂົາ ເພາະພວກມູຊິກເຫລົ່ານີ້ມັກ ນຳເອົາເຄື່ອງມືເຫລົ່ານີ້ ມາສ້ອມແປງຢູ່ໂຮງຊ່າງຕີເຫລັກຂອງພວກ ເຮົາເລື້ອຍໆ ພວກເຂົາຮູ້ອີກວ່າ ມີລູກຈ້າງລ້ຽງແກະລູກຈ້າງລາຍ ວັນຫລາຍຄົນປະສົບຊາຕາກຳອັນຫນ້າເສົ້າໃຈພໍພຽງໃດ, ພວກກູ ລັກຂັບໄລ່ພວກເຂົາອອກຈາກວຽກງານ ໂດຍບໍ່ຄຶດໄລ່ຄ່າແຮງງານທີ່ ເຮັດໄປແລ້ວນັ້ນຊ້ຳເລື້ອຍໆ.

ເວົ້າກັນຕາມຄວາມຈິງແລ້ວ ຂ້າພະເຈົ້າເອງ ກໍຕິດແປດພະຍາດ ກຽດຊັງໂລກຂອງຊາວນາຮັ່ງ ທີ່ດຳລົງຊີວິດຢູ່ເບື້ອງຫລັງກຳແພງນຳ ພວກເດັກນ້ອຍແດ່ແລ້ວ.

ຢ່າງໃດກໍຕາມ ການຜິດຫຽງອັນມີຢູ່ເປັນປະຈຳແນວນີ້ ກໍຫາກ ເຮັດໃຫ້ຂ້າພະເຈົ້າວິຕົກກັງວົນຢູ່ ຕື່ມໃສ່ເລື່ອງນີ້ຍັງມີເລື່ອງສາຍພົວ ພັນແບບປະປັກກັບຝ່າຍອຳນາດການປົກຄອງທ້ອງຖິ່ນອີກ. ເມື່ອ ຍິນຍອມສົ່ງເດັກນ້ອຍໃນເຂດເຄຫາ ແຕຣແກ ໃຫ້ພວກເຮົາແລ້ວ ລູກາ ເຊມືອໂນວິດກໍຫາກຍັງບໍ່ຫມົດຄວາມຫວັງ ໃນການຍາດແຍ່ງ ເອົາອາຄານນິຄົມໃຫມ່ຈາກພວກເຮົາ, ໂດຍອ້າງວ່າຈະຕັ້ງໂຮງຮຽນ

ຂົ້ນບິນຜືນແຜ່ນດິນ ແຕຣບແກ. ລາວພະຍາຍາມແລ່ນເຕັ້ນ ດຳເນີນ ງານຫລາຍຂັ້ນ ຢູ່ສະພາໂຊວຽດທ້ອງຖິ່ນ ເພື່ອຖືສິດໃນໂຮງສີ ແລະ ດິນແດນທັ້ງຫມົດແຫ່ງນີ້. ອາໄສການຮ່ວມມືຮູ້ເຫັນເປັນໃຈຂອງ ຍາດພີ່ນ້ອງ ແລະພວກນັກເລງ ຢູ່ໃນເມືອງ ລາວຈຶ່ງສາມາດຊື້ເອົາ ປືກຕືກເບ້ອງຫນຶ່ງຂອງນິຄົມໃຫມ່ ເພື່ອນ້ຳງໄປປຸກຢູ່ໃນບ້ານຂອງ ລາວ. ພວກເຮົາຕ້ານທານພຶດຕິກຳບຸກຮຸກຄັ້ງນີ້ດ້ວຍກຳປັ້ນແລະ ຫລັກຮົ້ວ. ຂ້າພະເຈົ້າສາມາດລົບລ້າງການຊື້ຂາຍອັນນີ້ດ້ວຍຄວາມ ຫຍຸ້ງຍາກທີ່ສຸດ ແລະສາມາດພິສູດໃຫ້ທາງເມືອງຮັບຮູ້ວ່າ ລູກາ ເຊ ມືອໂນວິດກັບພວກຍາດພີ່ນ້ອງຂອງລາວ ໄດ້ຊື້ເຮືອນຫລັງນີ້ ເພື່ອ ນ້ຳງໄປດັ່ງເຮັດຟືນເທົ່ານັ້ນ.

ລູກາ ເຊມືອໂນວິດ ກັບພັກພວກ ຂຽນຫນັງສືຟ້ອງຮ້ອງນິຄົມ ພວກເຮົາຢ່າງບໍ່ຢຸດບໍ່ຢ່ອນເປັນ ພວກເຂົາໃສ່ຮ້າຍປ້າຍສີພວກເຮົາ ຢ່າງຮຸນແຮງຢູ່ຕາມສະຖານທີ່ລັດຖະການອົງການຕ່າງໆ ແລະກໍແມ່ນ ຍ້ອນການຈ້ຳຈີ່ນວິນວາຍຂອງພວກເຂົານັ້ນເອງ ຕຳຫລວດຈຶ່ງລົງມາ ກວດຄົ້ນພວກເຮົາ.

ຫລ່ຳລະດູຫນາວ ລູກາ ເຊມືອໂນວິດ ໂປໂລເຂົ້າມາໃນຫ້ອງ ການຂອງຂ້າພະເຈົ້າ ອອກຄຳສັ່ງຢ່າງວາງອຳນາດວ່າ:

- ເອົາເອກະສານຂອງເຈົ້າມາ, ພວກເຮົາຊິກວດກາເບິ່ງວ່າ ເຈົ້າໃຊ້ຈ່າຍເງິນໄດ້ຈາກການສ້ອມແປງເຄື່ອງ ຢູ່ໂຮງຕີເຫລັກໃຫ້ ໃຫບ້ານນັ້ນແບບໃດແດ່.

ຂ້າພະເຈົ້າບອກລາວວ່າ:

- ເຊີນອອກໄປ!

-ແມ່ນຫຍັງເກາະ?

-ອອກໄປ. ເຊີນອອກໄປໄດ້.

ແນ່ນອນວ່າ ທ່າທາງຂອງຂ້າພະເຈົ້າ ບໍ່ສະແດງອອກມາຈັກ ຫນ້ອຍວ່າ ຈະຍິນຍອມຜ່ອນຜັນຕາມຄວາມບົ່ງການຂອງລາວໃນ ເລື່ອງຢາກມາສະສາງເງິນເກັບຈາກໃຫ້ບ້ານນັ້ນ, ຈັ່ງຊັ້ນລາວຈົ່ງກ້ອຍ ອອກຫນີຢ່າງບໍ່ມີພິທີການໃດໆ ແຕ່ຫລັງຈາກເຫດການຄັ້ງນີ້ແລ້ວ ລູກາ ເຊມືອໂນວິດ ປະກົດຕົວເປັນສັດຕູກັບຂ້າພະເຈົ້າ ແລະອົງ ການຈັດຕັ້ງທັງຫມົດຂອງພວກເຮົາຢ່າງຈະແຈ້ງ. ໃນທາງປີ້ນກັນ ພວກເດັກນ້ອຍນິຄົມ ກໍຄຸງດແຄ້ນຊິງຊັງລາວຊະນິດວ່າບໍ່ມີຫຍັງປຽບ ໄດ້ຕາມແບບແນວຄິດຊາວຫນຸ່ມຂອງພວກເຂົານັ້ນເອງ.

ໃນຕອນບ່າຍທີ່ຮ້ອນອົບເອົ້າຂອງວັນຫນຶ່ງກາງເດືອນມີຖຸນາ ຂະ ບວນຢ່າງແກ່ວຫນຶ່ງປາກົດຕົວຂຶ້ນທາງຟາກຫນອງ, ເມື່ອແກ່ວຂະ ບວນເຄື່ອນເຂົ້າມາໃກ້ ພວກເຮົາຈຶ່ງເຫັນສະພາບທີ່ພາໃຫ້ຂົນຫນາວ ລຸກເຍືອບ: ພວກມູຊິກສອງຄົນຈູງ ໂອປຣິສໂກ ກັບ ໂຊໂຣກາ ທີ່ຖືກມັດສອກຢ່າງນ່ໍາກົ້ນມາຕິດໆ. ຈະເບິ່ງໃນແງ່ໃດກໍຕາມ ໂອ ປຣິສໂກ ເປັນຄົນເດັ່ນກ້າຫານຄົນຫນຶ່ງ, ຢູ່ນິຄົມ ມັນຍ້ານຕັ້ງແຕ່ ອານໂຕນ ບຣາເຊັນໂກ ຄົນດຽວ. ມັນເຮັດວຽກຢູ່ໃນຫນ່ວຍຂອງ ບຣາເຊັນໂກ ຈັ່ງຊັ້ນຈຶ່ງເຄີຍສໍາຜັດກັບກໍາລັງຂອງຝ່າຍນີ້ມາແລ້ວ ຫລາຍເທື່ອ. ໂອປຣິສໂກ ເປັນຄົນຮ່າງກຶດໃຫຍ່ແຂງແຮງ, ມັນ ແຮງກວ່າ ອານໂຕນ ອີກແຕ່ກໍຫາກຮັກໄຄ່ຫລີ່ໄຫລໃນຕີວນັກລ້ຽງ ມ້າຂອງພວກເຮົາຢ່າງບໍ່ມີເຫດມີຜົນ ເຮັດໃຫ້ ບຣາເຊັນໂກຕົກຢູ່ ໃນທ່າດີກ່ວາທຸກຢ່າງ, ກັບຄົນອື່ນ ໂອປອິສໂກ ວາງທ່າສູງໄວ້ໂຕ

ບໍ່ຍອມໃຫ້ໃຜລົ້ນ. ລັກສະນະເດັ່ນຢ່າງຫນຶ່ງອໍານວຍໃຫ້ຫມໍປະສົບ ຄວາມສໍາເລັດ, ມັນເປັນຄົນແຈ່ມໃສ, ມັກມີຫມູ່ຄູ່ຫຸ້ມລ້ອມສົ່ງ ສຽງອຶກກະທຶກ, ຍ້ອນແນວນີ້ ມັນຈຶ່ງມັກປາກົດຕົວຢູ່ໃນພາກສ່ວນ ທີ່ບໍ່ອາດມີຄົນປະເພດມັກສອຍລອຍ ຫລືຕີຫນ້າສະແດງຮ່ວມຢູ່ນໍາ. ເມື່ອຢູ່ສູນຈັດແບ່ງນັ້ນ ມັນປະຕິເສດຢ່າງແຂງຂັນສຸດຂີດ ທີ່ຈະມາຢູ່ ນິຄົມ ຈໍາເປັນຂ້າພະເຈົ້າຕ້ອງໄດ້ມາເອົາຕົວມັນເອງ, ມັນຕ້ອນຮັບ ຂ້າພະເຈົ້າດ້ວຍແສງຕາເຍາະເຍີ້ຍ, ນອນຢຽດຂາຢູ່ເທິງຕຽງເສີຍຢູ່.

- ເຈົ້າຊິໄປຕາຍທາງໃດກະໄປສາ, ຂ້ອຍບໍ່ອອກຈາກຫນ້ຶດອກ!

ຍ້ອນໄດ້ຍິນ ເລື່ອງກ່ຽວກັບລັກສະນະກ້າຫານເດັດດ່ຽວຂອງມັນ ມາແລ້ວ ຂ້າພະເຈົ້າເວົ້າກັບມັນດ້ວຍນໍ້າສຽງອ່ອນຫວານເປັນພິເສດ ວ່າ:

- ຂໍໂທດທີ່ຕ້ອງລົບກວນອາດຍາ! ແຕ່ຂ້ອຍຕ້ອງປະຕິບັດຫນ້າທີ່ ໃຫ້ສໍາເລັດ ຈັ່ງຊັ້ນຈຶ່ງຂໍຮ້ອງທ່ານໃຫ້ອົດສາລຸກມາຂຶ້ນກອງນໍ້າ ທີ່ ລໍ້ກ່ຽຢູ່ນັ້ນແລ້ວ.

ທໍາອິດ ໂອປຣິສໂກ ສະດຸ້ງນໍາສໍານວນ "ສຸພາບ" ອັນນີ້, ມັນ ໂຍ້ໂຕລຸກຈາກຕຽງແລ້ວ ແຕ່ຄວາມກຶຕ້ອມີໄຊເຫນືອຄວາມຄຶດ, ມັນ ລົ້ມຫົວລົງນອນໃສ່ຫມອນຄືນ ແລ້ວເວົ້າວ່າ:

- ບໍ່...ບໍ່ກະຍັງວ່າບໍ່!...ພໍແລ້ວ!

- ຖ້າເປັນແນວນີ້, ຂ້ອຍກໍຂໍລ່ວງເກີນອັນຍາຈັກຫນ້ອຍ ຊິໄດ້ ໃຊ້ກໍາລັງເດ້.

ໂອປຣິສໂກ ໂງຫົວທີ່ປົກຄຸມດ້ວຍເສັ້ນຜົມກູດເປັນລອນຂຶ້ນ

ຈາກຫມອນ, ມັນຈົ່ງເບິ່ງຂ້າພະເຈົ້າດ້ວຍແສງຕາສະແດງວ່າປະ
ຫລາດໃຈຢ່າງບໍ່ເຊື່ອງ່ອ.

- ເຮີ...ແມ່ນໂຕມາແຕ່ໃສລະ...ຄຶດວ່າມັນຊິງ່າຍຊັ້ນຫວະ ອັນຊິ
ໃຊ້ກຳລັງກັບເຮົານັ້ນນ໊ະ?

- ກະລຸນາ...ກໍ່ວ່າ ...

ຂ້າພະເຈົ້າກັດແຂ້ວເວົ້າທັງຕື່ມຄວາມເວົ້າແຝງສງດສີວ່າ:

- ທ່ານ ໂອປຣິສໂກ້ທີ່ຮັກ...

ແລະແລ້ວໃນທັນທີທັນໃດນັ້ນ ຂ້າພະເຈົ້າກໍຮ້ອງກ໊ວກໃສ່ມັນວ່າ:

- ລຸກຂຶ້ນດງອນ້ີ, ມ໊ງນອນຄອງເອົາວິມານອີ່ຫຍັງຢູ່ຫນ້ີ? ລຸກ
ຂ໊ຶ້ນດງອນ້ີ...

ມັນໂດດອອກຈາກຕງ ແລ່ນໄປຫາປ່ອງຢ້ຽມຮ້ອງຂ໊ຶ້ນວ່າ:

- ຟ້າເອີຍ...ຂ້ອຍຊິໂດດອອກທາງປ່ອງຢ້ຽມນ້ີລະ.

- ເອົາເລີຍບ້ັກຫລ້າ ໂດດໂລດ ໂດດແມ້ ຫລ໊ືວ່າຊິໄປຂ໊ຶ້ນກອງນ
ດ໊ງ...ກູບໍ່ມີເວລາອ້ໍແອ້ກັບມ໊ງປານໃດດອກ!

ພວກເຮົາຢູ່ເຮືອນຊັ້ນທີສາມ ຈັ່ງຊັ້ນ ໂອປຣິສໂກ ຈົ່ງຈຳເປັນ
ຢ້ຽມອອກຢ່າງແຈ່ມໃສຈິງໃຈ:

- ເອົາລະ. ຂ້ອຍຍອມແລ້ວ! ສູ້ເຈົ້າບໍ່ໄດ້ດອກ. ເຈົ້າແມ່ນຜູ້ອຳ
ນວຍການນິຄົມກ້ອກກີຫວະ?

- ເອ໊ີ!

- ພໍຊິບອກກັນແຕ່ທຳອິດໂລດດອກ! ບໍ່ຊັ້ນກໍໄດ້ອອກເດີນທາງ
ແຕ່ດົນແລ້ວ...

ມັນຟ້າວຈັດແຈ່ງແຕ່ງເອົາເຄ່ືອງສຳລັບອອກເດີນທາງ.

ຢູ່ທີ່ນີ້ຄົນ, ມັນເຂົ້າຮ່ວມສ້າງພຶດຕິກຳທຸກແບບທຸກແນວກັບ ພວກຫມູ່ ແຕ່ບໍ່ສະແດງຕົວຮັບບົດບາດສຳຄັນຈັກເທື່ອ, ເບິ່ງຄືວ່າ ມັນຊອກສະແຫວງຫາໂອກາດຜະຈົນໄພ ຫລາຍກວ່າຢາກໄດ້ຊັບສົມ ບັດອັນໃດອັນຫນຶ່ງ.

ໂຊໂຣການັ້ນ ອາຍຸອ່ອນກ່ວາ ໂອປຣິສໂກ, ໃບຫນ້າຂອງຫນໍ ກົມນິນເປັນຕາເບິ່ງແຕ່ໂງ້ຈ້ຳຢ່າງຄາດບໍ່ເຖິງ ທັງເປັນຄົນໂຊກຮ້າຍຢູ່ ສະເຫມີ. ຈ່ຳຊັ້ນເມື່ອພວກເດັກນ້ອຍເຫັນມັນກຶກມັດສອກຍ່າງມາ ນຳໂອປຣິສໂກ ພວກເຂົາຈຶ່ງບໍ່ພໍໃຈຍິ່ງຫນັກ.

-ມັນເລື່ອງຫຍັງຫນໍຄິມິຕຣີ ຈຶ່ງອອກໄປກັບຫນໍໂຊໂຣກາ...

ປະທານສະພາໂຊວຄເອງກັບຄົນເກົ່າແກ່ ທີ່ພວກເຮົາຮູ້ຈັກຄື ມູຊີ ກາໂປວິດ ຍ່າງນຳຄຸ້ມກັນພວກເຂົາມາ.

ໃນສະພາບການນີ້ ທ່າທີວ່າງຕົວຂອງ ມູຊີ ກາໂປວິດ ບໍ່ຜິດກັບ ເທວະດາກຳລັງໂກຫາ, ສ່ວນລູກາ ເຊມີໂນວິດນັ້ນ ເຄັ່ງຂຶມອົ້ມຄົ້ມ ແບບຜູ້ກຳສິດອຳນາດການປົກຄອງຊະນິດທີ່ວ່າ ບໍ່ອາດມີຫຍັງໄປກະ ທົບໄດ້ ຫນວດເຂົ້າສີແດງຫວີຮຽບຮ້ອຍສະເຫມີ, ພາຍໃຕ້ເສື້ອ ແຂນຍາວແສ່ວລວດລາຍຊັກມາໃຫມ່ອ່ອງຕ່ອງ... ສະແດງວ່າເຂົາຫາ ກໍເລີກມາແຕ່ໂບດຫວ່າງບໍ່ດົນມານີ້ເອງ.

ທ່ານປະທານເລີ່ມຂຶ້ນວ່າ:

-ຈັ່ງແມ່ນ ເຈົ້າສຶກສາອົບຮົມເດັກນ້ອຍເຈົ້າຄັກແນ່ະ...

-ແລ້ວມັນກ່ຽວຫຍັງກັບເຈົ້າລະ?ຂ້າພະເຈົ້າຕອບຄືນໃນທັນທີ.

-ຂ້ອຍຊິບອກເຈົ້າດຽວນີ້ລະວ່າ ພວກເດັກນ້ອຍເຈົ້າເຮັດໃຫ້

ປະຊາຊົນແກວນີ້ ນອນຕາບໍ່ຫລັບ, ຫາລັກຫາປຸ້ນຢູ່ທົ່ວທຶບ ຕາມ ກະຫນົນຫົນທາງກະລັດຈອບຕີຫົວຄົນ.

-ເຮີ...ພໍ່ເກົ່າ...ແລ້ວເຈົ້າມີສິດຫຍັງຈຶ່ງມັດສອກພວກເຂົາແນວ ນີ້ລະ? ສຽງເດັກນ້ອຍດັງຟົດຂຶ້ນແຊວໆ.

-ລາວຄຶດວ່າດວງນີ້ຍັງແມ່ນຢູ່ໃນລະບອບເກົ່າອີກ...

-ຕ້ອງຈັດການໃຫ້ລາວຮູ້ຈັກຫນ້ອຍ...

-ນິດ! ຂ້າພະເຈົ້າຮ້ອງໃສ່. -ມີຫຍັງເວົ້າມາ.

ນູຊີ ກາໂປວິດ ເປັນຜູ້ເວົ້າຕໍ່ວ່າ:

-ເມຍຂ້ອຍຕາກສົ້ນກະໂປງກັບຜ້າຫົ່ມໃສ່ຮົ້ວໄວ້, ພວກສອງ ຄົນນີ້ກາຍໄປ. ຂ້ອຍແນມກັບມາ. ຮົ້ວແປນເອິດເຕິດແລ້ວເດ້. ຂ້ອຍແລ່ນນຳ. ພວກມັນກໍຟ້າວໃສ່ຕີນຫນີແລ່ນ. ໂຍ້ວ ເຮັດແນວ ໃດຊິທັນເນາະ ໂຊກດີ ຂອບຄຸນພະເຈົ້າ, ຂ້ອຍເຫັນລູກ ເຊມືອໂນ ວິດ ກັບມາແຕ່ໂຍດ. ຈັ່ງຊັ້ນລະກະເລີຍຈັບພວກເຂົາໄດ້.

-ແລ້ວເປັນຫຍັງຈຶ່ງຕ້ອງມັດພວກເຂົາລະ? -ມີສຽງຖາມດັງມາ ຈາກກຸ່ມເດັກນ້ອຍ.

-ກໍເພື່ອບໍ່ໃຫ້ພວກມັນແລ່ນເປີດຫນີໄດ້ຫັ້ນຕິ.

-ພວກເຮົາບໍ່ຕ້ອງມາກົກກ່ຽງກັນຢູ່ຫນີ້ດອກ, ທ່ານປະທານ ເວົ້ຂຶ້ນ, - ຂຶ້ນໄປຂຽນສຳນວນຄະດີກັນດີກ່ວາ!

-ບໍ່ຕ້ອງເຮັດ ສຳນວນຄະດີກໍໄດ້ຕິ, ພວກເຂົາສິ່ງເຄື່ອງຫນິດ ແລ້ວບໍ່ແມ່ນຫວະ?

-ສິ່ງແລ້ວກໍຕາມ ຕ້ອງສົ່ງຄະດີຟ້ອງຮ້ອງຢູ່ນັ້ນລະ!

ທ່ານປະທານດຶງດັນຢ່າງເດັດຂາດທີ່ຈະສົ່ງຄະດີຂຶ້ນຟ້ອງຕໍ່ສານ,

ເວົ້າກັນຕາມຈິງ ລາວເປັນຝ່າຍໄດ້ປຽບແລ້ວ ເພາະວ່ານີ້ເປັນຄັ້ງທຳ
ອິດທີ່ພວກເດັກນ້ອຍຖືກຈັບໄດ້ແບບຄາຫນ້າຄາເຂົ້າແນວນີ້.

ສຳລັບພວກເຮົາເລື່ອງມັນຫນ້າອັບອາຍຂາຍຫນ້າແທ້ໆ, ການ
ຍື່ນພ້ອງແບບນີ້ຈະເຮັດໃຫ້ພວກເດັກນ້ອຍຖືກສົ່ງໄປເຂົ້າຄຸກ ຢ່າງ
ແນ່ນອນ ແລະມັນກໍແມ່ນການປະທັບການແຫ່ງຄວາມອັບອາຍໃສ່ນິຄົມ
ຢ່າງບໍ່ໝົດຫ້ວຍອອກໄດ້.

ຂ້າພະເຈົ້າພະຍາຍາມອ້ອນວອນວ່າ:

-ນັບວ່າເປັນເທື່ອທຳອິດ ທີ່ພວກເຂົາຖືກຈັບໄດ້, ມັນກະ
ເປັນແນວນີ້ແລ້ວ...ຂອງຄົນຢູ່ໃກ້ກັນ! ອະໄພໃຫ້ພວກເຂົາສາ...ຫາ
ກໍເທື່ອດຽວຫນໍ່ໆ.

ເກົ້າຫນວດແດງຕອບວ່າ:

-ບໍ່...ບໍ່, ເດັດຂາດ, ໄປຫ້ອງການຂຽນໃບຍື່ນພ້ອງກັນ.

ມູຊີ ກາໂປວິດ ເວົ້າທວນຄືນວ່າ:

-ເຈົ້າກະຍັງຈື່ຕື ຕອນເຈົ້າຈັບຂ້ອຍໄດ້ໃນຄືນນັ້ນຫັ້ນນ໋ະ? ແລ້ວ
ຂວານຂ້ອຍກະຍັງຢູ່ນຳພວກເຈົ້າ...ຂ້ອຍເສຍຄ່າປັບໄຫມທໍ່ໃດ ຮຶ..!

ຂ້າພະເຈົ້າບໍ່ມີສິດໂຕ້ຕອບເລີຍ ຖືກອັດປາກຢ່າງບໍ່ມີທາງແກ້ໃດໆ
ເມື່ອຊີບອກຫົນທາງໄປຫ້ອງການໃຫ້ແກ່ຝ່າຍມີໄຊແລ້ວ ຂ້າພະເຈົ້າ
ຈຶ່ງເວົ້າກັບພວກເດັກນ້ອຍດ້ວຍຄວາມໂກດແຄ້ນແຫນ້ນໃຈວ່າ:

-ສົມນ້ຳຫນ້າສູບໍ່? ມັກແນວໃດ ກະໄດ້ແນວນັ້ນ, ຮຶ! ພວກ
ອັນຍາບ່າວນ້ອຍຫມູ່ນີ້ຢາກນຸ່ງສົ້ນກະໂປງ ຄັກລະບໍ້ ໄດ້ແລ້ວເດ້ບາດ
ນີ້! ງາມຫລາຍຕ່ວ ພວກຂີ້ຂຶ້ດເອີ! ສ່ວນນັກຈ້ຳທັ້ງສອງນີ້ກໍເຊີນໄປ
ນອນຢູ່ຄຸກພຸ້ນ!

ພວກເດັກນ້ອຍອັດປາກມິດຊ້ອຍນ້ອຍ ເພາະຄວາມຈິງກໍເປັນ
ເຊັ່ນນັ້ນແທ້ ພວກເຂົາໄດ້ຮັບໂທດກຳຕາມທີ່ໄດ້ກໍ່ຂຶ້ນເອງ.

ຫລັງຈາກກ່າວປາໄສແຝງດ້ວຍຍອດຫລັກການສຶກສາສາດອັນ
ນີ້ສຸດລົງແລ້ວ ຂ້າພະເຈົ້າຈຶ່ງເຂົ້າໄປໃນຫ້ອງການ.

ຕະຫລອດເວລາສອງຊົ່ວໂມງເຕັມໆ ຂ້າພະເຈົ້າອ້ອນວອນຮ້ອງ
ຂໍທ່ານປະທານ ໃຫ້ຄຳຫມັ້ນສັນຍາວ່າຈະບໍ່ໃຫ້ເກີດມີເລື່ອງເຊັ່ນນີ້
ອີກ ແລະວ່າຂ້າພະເຈົ້າຍິນດີຕິກລົງເຮັດລະບົບກົງລໍ້ໃຫ້ສະພາໂຊ
ຈຸດທ້ອງກຶ່ນຫນ້ຳຊຸດຊະນິດດີພິເສດ ໃນທີ່ສຸດທ່ານປະທານກໍຕົກ
ລົງແລະວາງເງື່ອນໄຂຂໍ້ດຽວວ່າ:

- ໃຫ້ພວກເດັກນ້ອຍທັ້ງຫມົດມາຂໍຮ້ອງອ້ອນວອນນຳຂ້ອຍ!

ໃນຊົ່ວຊີວິດຜ່ານມາ, ແມ່ນໃນເວລາສອງຊົ່ວໂມງນີ້ເອງທີ່
ຂ້າພະເຈົ້າໄດ້ຮຽນຮູ້ວ່າ ຄວາມເຫລືອໃຈເປັນແນວໃດ. ໃນລະຫວ່າງ
ການສົນທະນາແນວຄິດກະຫາຍເລືອດອັນຫນຶ່ງ ກໍລຶເລືອເຂົ້າສະ
ຫມອງຂ້າພະເຈົ້າ: ຖ້າຫາກວ່າມີໃຜຜູ້ຫນຶ່ງຈັບພວກເຂົາໄດ້ຢູ່ແຈ
ໃດແຈຫນຶ່ງໃນບ່ອນມືດມົດ ແລ້ວຟາດຫົວແຕກໄປເລີຍ, ຂ້າພະເຈົ້າ
ຄົງບໍ່ມີໂອກາດຊ່ອຍເຫລືອພວກເຂົາເປັນແນ່!

ຈົ່ງຊັ້ນມາຮອດຂັ້ນນີ້ແລ້ວ, ຂ້າພະເຈົ້າກໍບໍ່ມີທາງເລືອກແບບ
ອື່ນ. ຂ້າພະເຈົ້າສັ່ງໃຫ້ເດັກນ້ອຍມາຢືນລຽນແຖວຕໍ່ຫນ້າລະບຽງ
ບ່ອນຜູ້ຕາງຫນ້າອຳນາດການປົກຄອງຈະອອກມາ. ເມື່ອຍົກມືຂຶ້ນ
ແຕະປາຍຫມວກເງີບນັ້ນ ຂ້າພະເຈົ້າປະກາດໃນນາມນິຄົມວ່າ ພວກ
ເຮົາມີຄວາມເສຍໃຈທີ່ເກີດມີເຫດການບໍ່ດີຂຶ້ນໂດຍສະມາຊິກບາງ
ຄົນຂອງນິຄົມ ແລະຂໍອະໄພໂທດແທນພວກເຂົາ ໂດຍໃຫ້ສັນຍາ

ວ່າ ເຫດການແບບເກົ່າຈະບໍ່ເກີດຊ້ຳອີກເປັນເດັດຂາດ. ລູກາ ເຊ ມືອໂນອິດ ກ່າວຄຳປາໄສຕາມເນື້ອໃນຕໍ່ໄປນີ້:

-ເວົ້າກັນຢ່າງບໍ່ມີເງື່ອນໄຂຫນິດເນາະ. ກໍ່ເລື່ອງແບບນີ້ ມັນ ຕ້ອງຖືກລົງໂທດຕາມກົດຫມາຍຢ່າງເຄັ່ງຄັດທີ່ສຸດເລີຍລະ ເພາະວ່າ ຊິເວົ້າຈັ່ງໃດກະເວົ້າ ພວກປະຊາຊົນຊາວບ້ານນະ ເຂົາເປັນຜູ້ອອກ ແຮງງານ. ບັດນີ້ ມາສົມມຸດເບິ່ງວ່າມີປະຊາຊົນຄົນຫນຶ່ງເອົາລົ້ນໄປ ຕາກໄວ້ ແລ້ວມີຄົນມາລັກເອົາໄປມັນ ແນ່ນອນແລ້ວວ່າ ຄົນຜູ້ເຮັດ ແບບນັ້ນ ມັນແມ່ນສັດຕູຂອງປະຊາຊົນ, ສັດຕູຂອງຊົນຊັ້ນກຳມາ ຊີບ. ຂ້ອຍເປັນຜູ້ຕາງຫນ້າອຳນາດການປົກຄອງໂຊວຽດ ຈັ່ງບໍ່ອາດ ໂຍະຍານໃຫ້ກັບການຝ່າຝືນແນວນີ້, ບໍ່ປ່ອຍໃຫ້ໂຈນຫລົບລີ້ລອດ ກອນທາງໃດມາສະແດງອຳນາດບາດໃຫຍ່ໄດ້. ຍ້ອນວ່າພວກເຈົ້າ ທັ້ງຫນິດ ທີ່ຢູ່ຫນີ້ໄດ້ພາກັນຂໍຮ້ອງຢ່າງບໍ່ມີເງື່ອນໄຂໃດໆນອກຈາກ ຄຳຫມັ້ນສັນຍາ ກະຊິໄດ້ເບິ່ງກັນອີກຕໍ່ໄປກ່ອນ, ອີງໃສ່ວ່າພວກ ເຈົ້າໄດ້ຂໍຮ້ອງອ້ອນວອນຂ້ອຍ ທັ້ງຜູ້ອຳນວຍການພວກເຈົ້າກໍສັນຍາ ວ່າ ຈະເຝິກສອນໃຫ້ພວກເຂົາກາຍເປັນປະຊາຊົນພົນລະເມືອງດີ ບໍ່ແມ່ນໃຫ້ເປັນໂຈນ ຂ້ອຍກໍຈະຍົກໂທດໃຫ້ພວກເຈົ້າຢ່າງບໍ່ມີເງື່ອນ ໄຂຄືກັນ.

ໂຕຂ້າພະເຈົ້າສັ່ນດ້ວຍຄວາມອັບອາຍແລະໂມໂຫ, ໂອປຣິສໂກ ກັບ ໂຊໂຣການັ້ນຍືນໂຕແຂງປະບິນກັບຫມູ່ຢູ່ໃນແຖວ ເບິ່ງຫນ້າ ພວກເຂົາເມັ້ນຈິດປານບໍ່ມີເລືອດຈັກຢອດ.

ຜູ້ຕາງຫນ້າອຳນາດການປົກຄອງກັບ ມູຊີ ກາໂປວິດ ຈັບມືຂ້າ ພະເຈົ້າສັ່ນທັ້ງເວົ້າອັນໃດອັນຫນຶ່ງ ອອກມາສະແດງເຖິງຄຸນນະທຳ

ແລະການບໍ່ຈອງກຳຈອງເວນຕໍ່ກັນ ແຕ່ຂ້າພະເຈົ້າບໍ່ໄດ້ຟັງພວກເຂົາ ດອກ.

- ເລີກແກ່ວ!

ດວງຕາເວັນສາດເງົາແສງຮ້ອນແຮງຢູ່ເຫນືອນິຄົມ ກົ້ນຫອມ ຜັກກ້ານກ່ຳກະຈາຍ ອິບອວນຢູ່ທົ່ວຫນ້າດິນ ກະແສລົມສີຫມົ້ນ ຄາມທົບມ້ວນຕົວລອຍລົ່ວເຂົ້າສູ່ປ່າ.

ຂ້າພະເຈົ້າແນມໄປອ້ອມໆໂຕ ທຸກສິ່ງທຸກຢ່າງທີ່ປະກອບຕົວ ເປັນນິຄົມຍັງຄົງຢູ່ຄືເກົ່າ ເຮືອນກໍດິນຈີ່ຮູບສີ່ຫລ່ຽມ, ນັກຮຽນ ຫນ້າເກົ່າ ແລະຮອດມ້ວ໋ນ ທຸກຢ່າງກໍຍັງຈະເປັນຢູ່ແບບນີ້ຄືເກົ່າ: ລົ້ນກະໂປງເສຍ ທ່ານປະທານ ມູຊີ ກາໂປວິດ, ການເດີນທາງ ອັນຫນ້າເບື່ອຫນ່າຍເຂົ້າໄປໃນເມືອງ ກອງຂີ້ເຫຍື້ອຫນອນເຈາະ ຫນ້າຂີ້ດຽດ! ຢູ່ຕໍ່ຫນ້າຂ້າພະເຈົ້າ ບານປະຕູຫ້ອງນອນໄຂກ້ວາງຢູ່ ໃນນັ້ນມີຕຽງພັບກັບໂຕະເຮັດດ້ວຍໄມ້ດິບຢ່າງລະຫນ່ວຍ ຢູ່ເທິງໂຕະ ມີແອບໃສ່ຢາເສັ້ນວາງຢູ່.

"ຊິເຮັດແນວໃດ? ເຮົາຊິຕ້ອງເຮັດຫຍັງອີກ? ຊິຕ້ອງເຮັດ ຫຍັງ?"

ຂ້າພະເຈົ້າກົ້ມບາດຕີນຢ່າງມຸ່ງຫນ້າເຂົ້າປ່າ.

ໃນເວລາທ່ຽງກາງເວັນແນວນ້ີ ຕົ້ນແປກບໍ່ໃຫ້ຮົ່ມເງົາພໍຈົ້ນຫົວ ເລີຍແດ່ ເລີກເຂົ້າໄປພົ້ນທຸກຢ່າງແຈ່ມແຈ້ງຮຽບຮ້ອຍເປັນລະບຽບ ຫນ້າອັດສະຈັນ, ທຸກຢ່າງປອດໂປ່ງໂລ່ງແປນ ຕົ້ນໄມ້ອ່ອນປ້ຽວຊອນ ຂົ້ນເປັນແກ່ວພາຍໃຕ້ທ້ອງຟ້າແຫ່ງນີ້ຄືກັບວ່າ ແມ່ນສິ່ງປະດັບຢ່າງ ຫນຶ່ງ, ທຳມະຊາດເຫລົ່ານີ້ຊິງຕົວຢູ່ຮ່ວມກັນຢ່າງສະຫງົບສະຫງຽມ ປາສະຈາກຄວາມມຸ່ງຫວັງສູງສົ່ງທັ້ງປວງ.

ເວົ້າແທ້ແລ້ວ ພວກເຮົາດຳລົງຊີວິດຢູ່ກາງປ່າ ແຕ່ເກົ່ງປານນັ້ນ ຂ້າພະເຈົ້າ ຍັງບໍ່ເຄີຍມີໂອກາດກ້າວເຂົ້າ ເຖິງຄວາມລຳເລິກຂອງມັນ ຈັກເທື່ອ. ວຽກງານກ່ຽວກັບມະນຸດມະນາແກ່ດຶງຂ້າພະເຈົ້າໄປຈ່ອງຕິດ ຢູ່ກັບໂຕະຕັ່ງ ຄອກສັດ ໂຮງລີດກອງນ ແລະຫ້ອງກັນກຽນ. ຄວາມ ສະຫງົບງຽບ ຄວາມແຈ່ມໃສປອດໂປ່ງສະຫວ່າງດາຂອງປ່າແປກ, ບັນຍາກາດອັນອົບອວນໄປດ້ວຍກິ່ນຫອມຂອງຢາງແປກ ທັງຫມົດນີ້ ມີພະລັງດຶງດູດ ບໍ່ຕ່າງຫຍັງກັບໂພງກົນເຫລັກ ຄົງບໍ່ມີໃຜຄຶດຢາກລາ ຈາກສະຖານທີ່ແຫ່ງນີ້ໄປ ຈະບໍ່ຫວນກັບມາຢ່າງຕະຫລອດການດອກ ເຂົາຜູ້ນັ້ນອາດຄຶດຢາກເຫັນຕົ້ນໄມ້ໃບຫຍ້າຫອມງາມສະຫງ່າຍືນຕົ້ ຕ້ຽງດັ່ນຢູ່ທ່າມກາງວົງລ້ອມຂອງຕົ້ນໄມ້ອື່ນໆ ກ້ອງທ້ອງຟ້າສີຄາມສົດ ໃສແຫ່ງນີ້ຕະຫລອດໄປ.

ມີສຽງງ່າໄມ້ຫັກດັງຄຶບແຄ໊ບຢູ່ທາງເບື້ອງຫລັງ, ຂ້າພະເຈົ້າ ງວາກແຫນອອກໄປອ້ອມໆຕົວ: ທົ່ວປ່າເຕັມໄປດ້ວຍເດັກນ້ອຍນິຄົມ ພວກເຂົາແລ່ນສົນສ່ວນປົບຟຸ້ນບັ້ພ໊ ເບິ່ງເປັນຫນ້າສົງໃສ, ບາງ ຄົນເຊື່ອງບ້ຽຢູ່ຫລັງຕົ້ນໄມ້ ແມ່ນຕອນພວກເຂົາແລ່ນຂ້າມໂຄກ ແປນມາພ໊ ເອງ ຂ້າພະເຈົ້າຈຶ່ງແຫນເຫັນພວກເຂົາ.

ຂ້າພະເຈົ້າຢຸດຢ່າງຮູ້ສຶກຕ່າງໃຈ ພວກເຂົາເອງກໍຢຸດຈົກຄືກັນ. ແສງຕາແຫລມຄົມ ທີ່ຈ້ອງແຫນເບິ່ງມາທາງຂ້າພະເຈົ້ານັ້ນ ປ່ຽນລົ້ນໄປ ດ້ວຍຄວາມຫວາດກົວ ປົນຄວາມສົງເລລໍຄອຍຢ່າງງຽບສະຫງັດຂາດ ການເຄື່ອນເຫນັງທຸກຢ່າງ.

- ພວກສູມາເຮັດຫຍັງຢູ່ຫນີ? ແລ້ວເລື່ອງຫຍັງຈຶ່ງມາແລ່ນນຳ ກັນກູແນວນີ້?

ຊາໂດຣອບ ຜູ້ຢູ່ໃກ້ກ່ວາຫມູ່ ບ່ຽງຕົວອອກຈາກລຳຕົ້ນໄມ້ ມາ ເວົ້າກັບຂ້າພະເຈົ້າດ້ວຍນ້ຳສຽງຫນັກແຫນ້ນສົມຄວນວ່າ:

-ກັບເມືອນີ້ຄົມເທາະ?

ຂ້າພະເຈົ້າຮູ້ສຶກຄືກັບວ່າມີກ້ອນອັນໃດອັນຫນຶ່ງແລ່ນຕຳຫົວໃຈ.

-ມີຫຍັງອີກຊັ້ນຫວະ?

-ບໍ່... ບໍ່ມີຫຍັງດອກ ໄປ໋ເມືອ!

-ໂຍ້ວ! ມີຫຍັງສູກໍເວົ້າມາເທາະແມ້! ແມ່ນພວກສູຫາແນວ ມາໃຫ້ກູຫົວຫມຸນອີກຊັ້ນຫວາ?

ຂ້າພະເຈົ້າຍ່າງເລັ່ງໄປຫາມັນ ເດັກນ້ອຍສອງສາມຄົນຫຍັບ ເຂົ້າມາ ສ່ວນພວກອື່ນໆຍັງຄົງຈອບຄອຍຢູ່ໄກໆຕໍ່ໄປ. ຊາໂດຣອບ ຊຸ໋ມບອກວ່າ:

-ພວກເຮົາຊິພາກັນໄປດອກ ແຕ່ວ່າຂໍນຳເຈົ້າຍ່າງຫນຶ່ງກ່ອນ!

-ສູຢາກໄດ້ຫຍັງ?

-ຂໍ໋ປັ໋ນສັ໋ນນຳເຈົ້າມາ...

-ປັ໋ນສັ໋ນຂອງກູນີ້ຫວະ?

ໃນທັນໃດນັ້ນ ຂ້າພະເຈົ້າກໍເຂົ້າໃຈວ່າ ມັນເປັນກັ໋ງວິນໃນເລື່ອງ ໃດ ຂ້າພະເຈົ້າຫົວຂ໋ົ້ນແຮງໆ:

-ອ່າ ປັ໋ນສັ໋ນຫວະ. ເຊີນເອົາເລີ... ເປັນແນວນີ້ກະມີ ເນາະ! ແຕ່ວ່າຄັນກູຢາກຕາຍຫວະກູແຂວນຄໍຫລືວ່າໂດດລົງຫນອງ ຫ້ັນກະໄດ້ຄືກັນຫ້ັນແລ້ວ.

ຊາໂດຣອບ ຫົວກ໋ົກຂ໋ົ້ນແຮງໆຈົນທົ່ວທັງປ່າສະເທືອນໄປນຳ.

-ອ່າ... ອະຈັ່ງຊັ້ນຫວະ, ຊັ້ນກະເອົາປັ໋ນເຈົ້າມ້ຽນສາ, ພວກ

ເຮົາໂລດຄິດວ່າ... ເອ້ເຈົ້າມາຍ່າງຫລົ້ນຊ່ຶງແມ່ນບໍ? ຊັ້ນກະດີແລ້ວ ສູພວກເຮົາຄືນເມືອໂວ້ຍ!

-ເກີດຫຍັງຂຶ້ນ?

ເມື່ອຂ້າພະເຈົ້າອອກຍ່າງມຸ່ງໄປທາງປ່ານັ້ນ ໂຊໂຮກາ ຟ້າວ ແລ່ນຫອບເມືອຫໍ້ພັກຮ້ອງວ່າ:

-ສູເອີ... ຫມູ່ເອີ... ໄວໆ... ໄປປ່າດຽວນີ້! ອານໂຕນ ເຊມືອໂນວິດ ຊິເອົາລູກປືນຍັດຫົວ... ນ່າ!

ບໍ່ທັນຟັງມັນເວົ້າສຸດຊໍ້າ ຫມິດທຸກຄົນພາກັນແລ່ນປຸ້ນອອກ ຈາກຫໍ້ພັກມາທັນທີ.

ໃນຕອນແລງ ທຸກຄົນຕົກຢູ່ໃນສະພາບສັບສົນວຸ້ນວາຍແບບບໍ່ ເຄີຍເປັນມາກ່ອນ ນອກຈາກ ການາບານີບຄົນດຽວ ເຊ່ິງສະແດງ ເປັນຕົວຕະຫລົກ, ປົ້ນຊ້າຍຫັນຂວາໂປໂລຂົ້ນດຽງນັ້ນດຽງນີ້ບໍ່ເຊົາ. ຊາໂດຣອບຫົວຍ່ຶງແຂ້ວທັງສາມສິບສອງເຫລັ້ມຄ່ອຍໆມິດໆ, ໂດຍ ບໍ່ມີເຫດຜົນຫຍັງຫມິດ ມັນກອດຫົວຫຍຸ້ງຫຍອງຂອງ ເຊລາປູຕົນ ໄວ້ເປັນປະຈຳ. ບູຮູນ ບໍ່ຍອມຖອຍຫ່າງຈາກຂ້າພະເຈົ້າ, ບໍ່ປາກບໍ່ ເວົ້າຫຍັງຫມິດ ຄົງຕົວຢູ່ມິດໆແລະເລິກລັບ. ໂອປຣິສໂກ ປ່ວງອາ ລະວາດຢູ່ຕ່າງຫາກ, ມັນໄປນອນຢູ່ບ່ອນຂອງໂກເຊຍ ແລ້ວຮ້ອງ ໄຫ້ອຸ່ມໆ ຫມູບຫນ້າໃສ່ຫມອນ ທີ່ເປິເປ້ືອນຂ້ຶດຽດ. ໂຊໂຮກາ ຫລອຍໄປລ້ີຢູ່ບ່ອນໃດບ່ອນຫນ່ຶງ ເພ່ືອຫລົບຫນີຈາກສຽງເຍາະເຍ້ີຍ ຂອງຫມູ່.

ຊາໂດຣອບ ເວົ້າຂຶ້ນວ່າ:

-ມາຫລົ້ນຫມາກຈຳເຄ່ືອງກັນເທາະ.

ແລ້ວພວກເຮົາກໍພາກັນຫລິ້ນເກມນີ້. ຈ່ຳຊ້ຳແລ້ວ ບາງຄັ້ງຫລັກ ການສຶກສາສາດກໍຫາກມີແນວເປັນຕາຫົວຂອງມັນຢູ່: ເດັກນ້ອຍ ຫົວໂຫຍ ອຶດຢາກຕັ້ງ ๔0 ຄົນ ພາກັນຫລິ້ນເກມຈ່ຳເຕື່ອງຢ່າງ ນ່ອນຊື່ນແຈ່ມໃສທີ່ສຸດໃນໂລກ ພາຍໃຕ້ແສງນວນສະຫວ່າງຂອງ ໂຄມໄຟນ້ຳມັນກ໊າດ...

ບົດທີ ๔๐

ສົມບັດເປັນແລະສົມບັດຕາຍ

ມາເຖິງລະດູບານໃຫມ່ ບັນຫາເລື່ອງມ້າໄກນາໄດ້ເຮັດໃຫ້ພວກ ເຮົາຫົວເຂົ່າອ່ອນໄປຫມົດ. ມ້ານັກນ້ອຍ ກັບອຶໂຈນນັ້ນໃຫ້ວ່າໃຊ້ ການຫຍັງບໍ່ໄດ້ແລ້ວ ບໍ່ມີທາງວ່າຊິເຮັດວຽກຫລ້ອນເລີຍ. ແຕ່ລະມື້ ໃນຕອນເຊົ້າໆພຸ້ນໂລດ ການີ ອີວາໂນວິດ ໄປໄປ່ຈາລະໄນຢູ່ຄອກ ມ້າໂດຍໃຊ້ຄຳເວົ້າແບບຕ້ານການປະຕິວັດແດ່ ລາວຕູ່ຫາວ່າອຳນາດ ການປົກຄອງໂຊວຽດຂາດຄວາມສາມາດ ທ້າໃຮ້ເມດຕາປານີຕໍ່ສັດ.

-ຄັນວ່າຢາກເຮັດນາທຳການປູກຝັງ ມັນກະຕ້ອງມີມ້າດີງມີ ເຫື່ອມີແຮງ ບໍ່ແມ່ນຊິມາຂີ່ມເຫັ້ງເຕັ້ງເຕັກ ພວກທີ່ປາກບໍ່ໄດ້ໄອບໍ່ ດ້ງແນວນີ້. ແມ່ນຢູ່ວ່າ ຕາມທິດສະດີແລ້ວ ມັນແມ່ນມ້າ ແຕ່ວ່າ ໃນໂຕຈິງເດ້ ມັນເປັນແນວໃດ... ມັນຈ່ອຍໂຊອຶດຫົວໃກ້ຊິຕາຍພໍ ແຮງ, ເບິ່ງກະເປັນຕາດູຕົນແລ້ວຊິຂີ່ມເຫັ້ງໃຫ້ມັນເຮັດວຽກແນວ ໃດ?

ບຮາເຊັ້ນໂກ ນັ້ນຊ້ຳມີທ່າທີງ່າຍໆ ມັນມັກມ້າກໍຕໍ່ເມື່ອວ່າ ມ້າ ນັ້ນມີຊີວິດຊີວາ ວຽກງານຟຸມເຟືອຍທຸກຢ່າງທີ່ພວກຫມູ່ມັນຮັບພາ

ລະໄວ້ນັ້ນ ເຮັດໃຫ້ມັນບໍ່ພໍໃຈ ແລະແຄ້ນເຄືອງຂຶ້ນໂລດ, ບໍ່ວ່າໃຜ ຈະເວົ້າຈະວ່າແນວໃດ ມັນກໍຍັງຄົງຮັກສາຄຳຕອບອັນມີເຫດຜົນອັນ ນຶ່ງສະເໝີ:

-ຄັນເພິ່ນເອົາໂຕໄປແກ່ໄກເດ້ ໂຕຊິເປັນແນວໃດ? ເຮົາຢາກ ເຫັນເດ້ ຈັ່ງແມ່ນຊິຄັກຕ່ວາ.

ບຮາຊັ້ນໂກ ຕິລາຄາຄຳເວົ້າຂອງ ກາລີນາ ອີວາໂນວົ ວ່າ ເປັນຄຳຊົ່ວແນະ ບໍ່ໃຫ້ມ້າເຮັດວຽກໃດໆທັ້ງນັ້ນ ພວກເຮົາເອງ ກໍບໍ່ຢາກຮຽກຮ້ອງເອົາຫຍັງນຳມັນຫລາຍກ່ວານຶ້ດອກ. ຢູ່ນິຄົມ ໃຫມ່ພຸ້ນ ຄອກມ້າແປງຮຽບຮ້ອຍລໍຄອຍຕ້ອນຮັບມ້າສອງໂຕໄປຢູ່ ເພື່ອຄາດໄກ່ດິນປູກຫວ່ານ ໃນລະດູບານໃຫມ່ ແຕ່ພວກເຮົາບໍ່ມີ ມ້າເຫລົ່ານັ້ນ.

ມື້ຫນຶ່ງຂະນະທີ່ໂອ້ລົມກັບ ແຊກແມັນໂກ ປະທານອົງການ ກວດກາກຳມະກອນແລະຊາວນາ, ຂ້າພະເຈົ້າເວົ້າເຖິງຄວາມຫຍຸ້ງ ຍາກນຶ້ຂຶ້ນຢ່າງບັງເອີນ ໂດຍເວົ້າວ່າ ພວກເຮົາບໍ່ສາມາດເຮັດຫຍັງໄດ້ ເລີຍໃນລະດູບານໃຫມ່ປີນີ້ ຍ້ອນມ້າຈ່ອຍໂຊໂພດ ແຕ່ຈະໄປຫາມ້າ ດີໆແຂງແຮງມາແຕ່ໃສ? ນາຕັ້ງວ່າ 50 ເດເຊຍຕິນພຸ້ນນ່າ, ກ້າ ພວກເຮົາບໍ່ປູກເຂົ້າໃສ່ ພວກຊາວນາແຕ່ຊິພາກັນຫິວຂ້ອນລະບໍ້!

ແຊກແມັນໂກ ຄິດຢູ່ຄາວຫນຶ່ງ ບາດແລ້ວໂດດເຕັ້ນຂຶ້ນດ້ວຍ ຄວາມດີໃຈ:

-ຄິດອອກແລ້ວ! ຢູ່ຫນີ້ພວກເຮົາມີພະແນກເສດຖະກິດພິເສດ ຢູ່ພະແນກຫນຶ່ງ. ແລ້ວກະມີມ້າຫລາຍໂພດສຳລັບລະດູບານໃຫມ່ປີ ນີ້. ຂ້ອຍຊິໃຫ້ເຈົ້າຢືມໄປສາມໂຕ... ເຮັດແບບນີ້ ພວກເຮົາຍັງຊິ

ບໍ່ເປັ້ອງຫຍ້າ, ເຈົ້າເອົາໄປໃຊ້ວຽກຈັກເດືອນເດ໋ງແລ້ວຈົ່ງສົ່ງຄືນ, ໄປຫາຫົວຫນ້າເສດຖະກິດໂລດໄປ໋.

ຫົວຫນ້າເສດຖະກິດອົງການກວດກາກຳມະກອນຊາວນ່າ ເປັນຄົນກ໊ືລະບຽບເດ໋ງຄັດ ແລະມີຫົວອ່ອງໄວດີ ລາວຮຽກຮ້ອງເອົາຄ່າເຊົ່ານ້ຳໃນລາຄາສູງສົມຄວນຄ໊ື: ເຂົ້ານະເລ ๕ ປຸດ ຕໍ່ເດ໊ືອນ ແລະ ລ້ໃຫມ່ສຳລັບກອງນທ໊ີມັນຈະແກ່:

- ຂ້ອຍຮູ້ນ່າວ່າ ພວກເຈົ້າມີໂຮງເຮັດລ້ກອງນ.

- ຊູດຮ໊ືກັນໂພດ໊ີ! ເຈົ້າກະຮູ້ດ໊ືວ່າພວກເຮົາເປັນແນວໃດ?

- ຂ້ອຍແມ່ນຫົວຫນ້າເສດຖະກິດ ບໍ່ແມ່ນພວກຍາແມ່ຍານາງພະແນກປະຊາສົງເຄາະ. ໃຫ້ເຈົ້າໄປເຫັນນ້ຳຫມູນ້ັນກ່ອນ! ຂ້ອຍຊິເອົາມັນໃຫ້ພວກເຈົ້າໄປລ້ໆບໍ່ໄດ້ດອກ... ເຈົ້າຊິໄປໃຊ້ວຽກມັນໂພດ ຂ້ອຍຮູ້ຈັກນ່າ, ຂ້ອຍໃຊ້ເວລາຕ໋ັ້ງສອງປ໊ີພຸ້ນໃດ ຈົ່ງຫາໄດ້ແນວນ໊ີ ມັນບໍ່ແມ່ນນ້ຳທຳມະດ໋ໆດອກ... ຕ໋ັ້ງວ່າແມ່ນນ້ຳອັດສະດອນພຸ້ນລະ!

ຂ້ານ້ອຍເຈົ້າຈະຍອມໃຫ້ເຂົ້ານະເລລາວຮອດ ๑๐๐ ປຸດຕໍ່ເດ໊ືອນກັບລ້ ສຳລັບກອງນຫນ໊ິດທຸກເຫລ້ົມຢູ່ໃນເມ໊ືອງພຸ້ນແລ້ວ, ພວກເຮົາຕ້ອງການນ້ຳເຫລ໋ົ່ານ໊ີແທ້ໆ.

ຫົວຫນ້າເສດຖະກິດ ຂຽນສັນຍາເປັນສອງສະບັບບັນຈຸເນ໊ື້ອໃນລະອຽດທຸກຢ່າງທ໊ີຈຳເປັນແລະຫນ້າປະທັບໃຈ:

"...ນ໊ິຄົມທ໊ີບ໋ົ່ງຊ໊ື່ໄວ້ນ໊ີ.. ໃຫ້ສັນຍາກັບພະແນກເສດຖະກິດຂອງອົງການກວດກາກຳມະກອນແລະຊາວນາປະຈຳແຂວງ ວ່າຈະສົ່ງລ້ກອງນມາຕາມກຳນ໋ົດເວລາ ທ໊ີທາງຄະນະກຳມະການພິເສດບ໋ົ່ງໄວ້

ໃນບັນທຶກສະບັບດັ່ງກ່າວ... ຖ້າວ່າທາງນິຄົມຫາກສົ່ງມ້າຄືນບໍ່ທັນຕາມກຳນົດ ນິຄົມຈະຕ້ອງເສຍຄ່າປັບໄໝເປັນເຂົ້າບະເລໃຫ້ແກ່ ອ.ກ.ກ.ຊ. ຈຳນວນ ๑๐ ປອນຕໍ່ວັນສຳລັບມ້າໂຕໜຶ່ງ ທີ່ທາງນິຄົມຢືມໄປ... ໃນກໍລະນີທີ່ທາງນິຄົມບໍ່ສາມາດປະຕິບັດຕາມສັນຍາສະບັບນີ້, ນິຄົມຕ້ອງໃຊ້ຄ່າເສຍຫາຍເປັນມູນຄ່າສູງກ່ວາທີ່ຕົກລົງກັນໄວ້ ๕ ເທົ່າ..."

ນໍ້ຕ່ມາ ກາລິນາ ອິວາໂນວິດ ກັບ ບຮາເຊັນໂກ ກໍຂັບກອງມານິຄົມຢ່າງສະຫງ່າຜ່າເຜີຍ ພວກເດັກນ້ອຍໄດ້ອອກໄປຢືນຍາມຢູ່ຕາມຫົນທາງຕັ້ງແຕ່ເຊົ້າໆຟຸ້ນແລ້ວ. ທຸກຄົນໃນນິຄົມ ນັບຈົນຮອດພວກຄູສອນຕ່າງກໍກັ້ນໃຈລໍຄອຍ: ເຊລາປູຕິນກັບໂຕສະກາ ເປັນຜູ້ໂຊກດີກ່ວາຫມູ່, ພວກເຂົາພົບກັບກອງທັບຢູ່ກະຫນົບໃຫຍ່ ຈຶ່ງສອຍໂອກາດປົ້ນຂຶ້ນຂີ່ມ້າມາເລີຍ. ກາລິນາ ອິວາໂນວິດ ນັ້ນໃຫ້ວ່າບໍ່ສາມາດປາກໄດ້ຍົ້ມໄດ້ເອົາຊິໆ ຍ້ອນວ່າ ຈິດສຳນຶກຂອງລາວທັງຫມົດອາບເອື້ອບໄປດ້ວຍຄວາມທະນົງໃຈເດັ່ງຂຶ້ນ ຢ່າງຫາອັນປຽບບໍ່ໄດ້. ອານໂຕນ ບຮາເຊັນໂກເອງ ກໍບໍ່ຫັນຫົວມາທາງພວກເຮົາຊ້ຳ ເວລານັ້ນ ບໍ່ມີສັດຕົວໃດທີ່ມີລາຄາສູງສຳລັບມັນນອກຈາກມ້າດຳສາມໂຕທີ່ກຳລັງແລ່ນຕາມກອງທັບພວກເຮົາມາ.

ກາລິນາ ອິວາໂນວິດ ລົງຈາກກະໂລ່ງກະບະຮູບສີ່ຫລ່ຽມຍາວຄືໂລງ, ຊັ້ນເຟືອງເສັ້ນຫນຶ່ງທີ່ຕິດຄ້າງຢູ່ເສື້ອນອກອອກ ແລ້ວເວົ້າກັບອານໂຕນ ວ່າ:

- ເບິ່ງແຍງຈັດບ່ອນຢູ່ໃຫ້ມັນດີໆເດ້, ມັນບໍ່ຄ່ອຍໂຈນດອກເດ້ ມ້າພວກນີ້ ນໍ!

ອານໂຕນ ອອກຄຳສັ່ງສັ້ນໆໃຫ້ພວກລູກນ້ອງມັນ ແລ້ວຈຶ່ງເອົາ ມ້າໂຕເກົ່າ ທີ່ມັນເຄີຍນິຍົມຊົມຊອບເຂົ້າໄປໄວ້ໃນຄອກບ່ອນເວິ້ງໆ ທ້າງເປື່ອນທ້າງບໍ່ສະດວກທີ່ສຸດຟຸ້ນ, ມັນຍົກກຳປັ້ນຮ້ອງຮ້າຍພວກ ເດັກນ້ອຍສະຫລອກກອກທີ່ຢາກສອດສ່ອງເບິ່ງຄອກມ້າ ຈາກນັ້ນຈຶ່ງ ຕອບຊາຍຊະລາແບບຢອກຫລົ້ນຄືສ່ຽວວ່າ:

-ຫາເອົາບ້ວງຫຽນອັນໃຫມ່ມາ ອຶກຊາ ກາລິນາ ອິວາໂນວິດ. ອັນເກົ່ານີ້ໃຊ້ການຫຍັງບໍ່ໄດ້ແລ້ວ.

ມ້າທ້າງສາມ ສີດຳປອດ ອ້ວນພີດີງາມ, ພວກເດັກນ້ອຍເຫັນ ວ່າ ຊື່ເກົ່າຂອງພວກນັ້ນ ມີຄວາມຫມາຍເຫມາະສົມດີແລ້ວ ຟ້າຄື ວ່າມີສັກຕະກຸນວາດໃດວາດຫນຶ່ງ. ພວກມັນມີຊື່ວ່າ ບັກສີງ, ມີນ ລ້ຽ ແລະອຶເມຣິ.

ແຕ່ວ່າບໍ່ດົນ ບັກສີງ ກໍເຮັດໃຫ້ພວກເຮົາຜິດຫວັງ ມັນເປັນ ມ້າງາມແຕ່ວ່າບໍ່ເຫມາະສົມທີ່ຈະເຮັດວຽກກະສິກຳເລີຍ, ມັນເມື່ອຍ ໄວ ແລະຫັນໃຈຫຶດຫອບງ່າຍ. ກົງກັນຂ້າມ ບັກມີນລ້ຽ ກັບອຶ ເມຣິນັ້ນ ສະແດງຕົວວ່າສູ້ທົນຕໍ່ວຽກງານທຸກແບບທຸກແນວ: ມີນ ລ້ຽແຂງແຮງດີ, ນິໄສມັກສະຫງົບແລະທ່າທີສະຫງ່າງາມ. ເປັນ ຄວາມຈິງທີ່ວ່າ ຄວາມຫວັງທັງຫລາຍ ເຊິ່ງອານໂຕນ ບຮາເຊັນໂກ ຫລໍ່ລ້ຽງໄວ້ ຄືການຢາກມີມ້າແລ່ນຊຳຊະນິດດີເລີດຈັກໂຕ ເພື່ອວ່າ ເວລາເຂົ້າໄປໃນເມືອງ ມັນຊິໄດ້ຈ້າວແຊງກວ່ງນອື່ນໆໄດ້ສົມໃຈນັ້ນ ຕ້ອງພັງທະລາຍໄປ ແຕ່ວ່າເວລາເຂົ້າທຽມໄຖຫລືຈັກຫວ່ານ ມ້າ ພວກນີ້ຊ້ຳດີວິເສດທີ່ສຸດຈົນກາລິນາ ອິວາໂນວິດ ຕ້ອງຫັນໃຈໂລ່ງ ຢ່າງປອດໂປ່ງ ເມື່ອມາລາຍງານສູ່ຂ້າພະເຈົ້າຟັງໃນຕອນແລງ ກ່ຽວ

ກັບພົ້ນທີ່ຄາດໄກ ແລະຫວ່ານແນວແລ້ວ. ບັນຫາດຽວທີ່ລາວຍັງ ວິຕົກກັງວົນກໍແມ່ນການະອັນພິລຶກພິລໍ້ຂອງເຈົ້າຂອງນ້ຳ. ລາວເວົ້າ ວ່າ:

-ທັງຫມົດນີ້ກະຄັກຢູ່ດອກ ແຕ່ວ່າຄັນບັງເອີນພວກເຮົາໄປມີ ເລື່ອງອັນໃດອັນຫນຶ່ງກັບອົງການກວດການຳນະກອນຊາວນານີ້ນ່າ... ພວກເພິ່ນຫັ້ນຊິເຮັດແນວໃດກະໄດ້ຫັ້ນລະ ແຕ່ພວກເຮົານີ້ຕິ ຊິໄປ ພ້ອງໄປຮ້ອງທາງໃດ? ພ້ອງຮ້ອງກັບພວກເຂົາເອງຫວະ?

ນິຄົມໃຫມ່ເລີ່ມມີຊີວິດຊີວາຂຶ້ນແລ້ວ, ເຮືອນຫລັງຫນຶ່ງສ້ອມ ແປງແລ້ວຮຽບຮ້ອຍ ແລະມີເດັກນ້ອຍ ຝ ຄົນເຂົ້າໄປຢູ່. ພວກເຂົາ ໄປຢູ່ຫັ້ນຢ່າງບໍ່ມີຄູສອນບໍ່ມີແມ່ຄົວ ຊອກຫາເຄື່ອງຈາກສາງໄປແຕ່ງ ກິນເອງ ໂດຍຕັ້ງເຕົາໄຟນ້ອຍໆໃສ່ກາງສວນ. ພວກເຂົາມີຫນ້າທີ່ປົກ ປັກຮັກສາສວນ ການກໍ່ສ້າງ ຮັບປະກັນການຂ້າມນ້ຳຫ້ວຍໂກໂລ ນາກ ແລະຕັ້ງຜຽນກັນບໍ່ລະບັດຄອກມ້າສອງໂຕ. ໃນຂະນະນີ້ມີ ໂອປຣິສໂກຮ່ວມຢູ່ນຳໃນຖະນະຕົວແທນຂອງ ບຣາເຊັນໂກ ເຊິ່ງ ຕັດສິນໃຈຢູ່ນິຄົມເກົ່າບ່ອນມີຫມູ່ຄູ່ຫລາຍຄົນ ທັງບັນຍາກາດກໍແຈ່ມ ໃສພິດພື້ນກ່ວາ. ແຕ່ລະມື້ມັນອອກໄປກວດກາວຽກງານຢູ່ນິຄົມໃຫມ່ ອັນເຮັດໃຫ້ຫລາຍຜູ້ຫລາຍຄົນເກງກົວໄປຫມົດ ບໍ່ສະເພາະແຕ່ ພວກລ້ຽງມ້າກັບ ໂອປຣິສໂກເທົ່ານັ້ນ.

ບັດນີ້ ເທິງທົ່ງນາຂອງນິຄົມໃຫມ່ ວຽກງານອັນມະຫຶມາກຳລັງ ດຳເນີນໄປຢ່າງຟົດຮ້ອນ. ແນວປູກຫວ່ານໃສ່ຜືນແຜ່ນດິນທັງ ຝ ເດເຊຍຕີນ ແລ້ວຮຽບຮ້ອຍຢ່າງບໍ່ຕ້ອງໃຊ້ວິທະຍາສາດການກະເສດ ໃດໆຫລືວ່າບໍ່ສອດຄ່ອງກັບສະພາບທົ່ງນາພໍປານໃດ ແຕ່ເຂົ້າບະເລ

ຊະນິດປູກລະດູໃບໄມ້ຫລົ່ນກັບຊະນິດປູກລະດູບານໃຫມ່ທ້າງເຂົ້າໂອ໊ດ ກັບເຂົ້າໂປ້ງກໍຫາກແຕກຫນໍ່ຈໍ່ແຫນງອອກ. ຢູ່ເທິງເນື້ອທີ່ດິນປະ ມານ ມ-ຄ ເດເຊຍຕິນ ພວກເຮົາປູກມັນຝະລັ່ງ ແລະຫົວຜັກກາດ ຂາວໃສ່, ຈໍາພວກນີ້ຕ້ອງໄດ້ຂຸດກ່ອນ ແລ້ວຫລີກເອົາ ຈັ່ງຊັ້ນພວກ ເຮົາຕ້ອງພາກັນເຮັດວຽກຈົນຊື່ລົ້ມຊິຕາຍ ໃນເປົ່ງນັ້ນ ນິຄົມຂອງ ພວກເຮົາມີສະມາຊິກຮອດ ຜ໐ ຄົນແລ້ວ.

ລະຫວ່າງນິຄົມເກົ່າກັບນິຄົມໃຫມ່ນັ້ນ ມີການທ່ຽວໄປມາຫາສູ່ ກັນຕະຫລອດມື້ຕະຫລອດເວັນຈົນຮອດເດິກດື່ນກາງຄືນ: ເດັກ ນ້ອຍຫມູ່ຫນຶ່ງກັບມາແຕ່ເຮັດວຽກ ອີກຫມູ່ຫນຶ່ງຊໍ້ອອກໄປເຮັດ ວຽກ. ກວຽນຂອງພວກເຮົາທ່ຽວຂົນແກ່ເນອປູກ ຫຍ້າແຫ້ງສໍາລັບ ສັດ ຫລືແມ່ນແຕ່ອາຫານລ້ຽງປາກລ້ຽງທ້ອງພວກເຮົາ. ນອກນັ້ຍ ມີກວຽນທີ່ພວກເຮົາເຊົ່າມາຂົນເຄື່ອງກໍ່ສ້າງອີກຈໍານວນຫນຶ່ງ. ກາ ລືນາ ອີວາໂນວິດ ໃຊ້ກວຽນກະແຫະເກົ່າໆເຫລັ້ມຫນຶ່ງເປັນພາຫະ ນະຂົ່ໄປມາ. ບໍ່ມີໃຜຮູ້ວ່າ ລາວໄດ້ມັນມາຈາກໃສ. ອານໂຕນ ບຣາ ເຊັນໂກ ນັ້ນຂົ່ມ້າບັກສີ່ເລາະໄປຢ່າງສະຫງ່າງາມ.

ໃນວັນອາທິດ ເກືອບຫມົດທຸກຄົນໃນນິຄົມພາກັນລົງອາບນໍ້ ໃນຫ້ວຍໂກໂລມາກ ນັບແຕ່ພວກເດັກນ້ອຍຈົນຮອດຄູສອນ ຈັ່ງຊັ້ນ ຈຶ່ງມີພວກເຮັດຕາມແບບຢ່າງພວກເຮົາຕໍ່ ຄືພວກຜູ້ບ່າວຜູ້ສາວຊາວ ຫນຸ່ມກົມໂຊໂມນ ບ້ານປີໂຣກີບອະກາ ກັບບ້ານ ກົງຊາຮອບກາ ຕະຫລອດຮອດພວກບ່າວນາຂອງຊາວນາຮັ່ງ ທີ່ຢູ່ອ້ອມແອ້ມພວກ ເຮົາ ກໍລົງອາບນໍ້າຄືກັນ. ພວກເຂົາຄ່ອຍໆມາເຕົ້າໂຮມຢູ່ແຄມຝັ່ງນໍ້ ຫ້ວຍທີ່ໃສສະອາດແຈ່ມໃສແຫ່ງນີ້ເປັນອາຈິນ. ພວກຊ່າງໄມ້ຂອງ

ພວກເຮົາໄດ້ເຮັດແພລອຍອອກສູ່ວັງນ້ຳບ່ອນຫນຶ່ງ ແລ້ວພວກເຮົາ
ຈ່ຶງເອົາທຸງທີ່ຂຽນສະຫລັກອັກສອນຫຍໍ້ ນ.ກ. (ນິຄົມກ້ອກກີ) ໄປ
ປັກໃສ່ແພ ລະຫວ່າງແພກັບຝັ່ງນ້ຳເບ້ືອງພວກເຮົາມີເຮືອນ້ອຍທາ
ສີຂາວປັກທຸງແບບດຽວກັນລຳຫນຶ່ງ ລອຍຂ້າມໄປມາຕະຫລອດວັນ
ໂດຍມີ ມິເຕຍ ເຊເວລີ ກັບວິເຕຍ ໂບໂກຍຢາບເລັນຊະກີເປັນສີ
ພາຍ. ພວກນັກຮຽນເຂ້ົາໃຈດີເກ່ືາກຽດສັກສີອັນສຳຄັນຂອງພວກ
ເຮົາບິນຝັ່ງນ້ຳຫ້ວຍແຫ່ງນ້ັ້ນ ພວກເຂົາຈ່ຶງຫຍິບເສ້ືອຄໍທະຫານເຮືອ
ໃຫ້ມິເຕຍ ກັບວິເຕຍນຸ່ງ ໂດຍເອົາເສດຜ້າເຫລ ືອຈາກການຕັດ
ເຄ່ືອງພວກນັກຮຽນຍ ົງມາເຮັດ. ເລ ື່ອງມັນກາຍເປັນວ່າ ທ ັ້ງພວກ
ເດັກນ້ອຍນິຄົມເອງທ ັ້ງພວກທ ີ່ມາຈາກທາງອ ື່ນພາກັນອິດສາປາດຖະ
ຫນາຢ່າງແຮງກ ້າຍາກມີເສ ້ືອຄ ືບ່າວນ້ອຍໂຊກດີທ ັ້ງສອງ. ນ ້ຳຫ ້ວຍ
ໂກໂລມາກ ກາຍເປັນສະໂມສອນສຸນກາງຂອງພວກເຮົາໄປໃນຕ ິວ.

ນິຄົມອ ື່ມເຕ ັ້ມໄປດ ້ວຍຄວາມສ ິດຊ ື່ນເບ ີກບານ ມ ີສ ຽງສະ ທ ້ອນ
ຈາກການອອກແຮງງານຢ ່ າງ ຂ ັບຂ ັ ຽວ, ມ ີການແກ ້ ັ ບນ ທ ຫ ທ ີ ່ ເ ກ ີ ດ ຈ າ ກ
ວ ຽ ກ ງ ານ ນ ີ ້ ຢ ່ າ ງ ບ ໍ ່ ຫ ມ ິ ດ ບ ໍ ່ ສ ຽ ງ ເ ປ ັ ນ ມ ີ ພ ວ ກ ລ ູ ກ ຄ ້ າ ຊ າ ວ ນ າ ມ າ ຫ າ
ມ ີ ສ ຽ ງ ຈ ່ ຶ ມ ພ ຸ ມ ໆ ຂ ອ ງ ອ ານ ໂ ຕ ນ ຄ ໍ າ ປ າ ໄ ສ ັ ້ ນ ເ ຄ ່ ັ ງ ຂ ຶ ມ ຂ ອ ງ ກ າ ລ ິ ນ າ
ອ ິ ວ າ ໂ ນ ວ ິ ດ ມ ີ ສ ຽ ງ ຫ ິ ວ ສ ະ ອ ຶ ກ ສ ະ ອ ້ ອ ຍ ແ ລ ະ ກ ານ ເ ລ ົ ່ າ ເ ລ ື ່ ອ ງ ຕ ະ ຫ ລ ິ ກ
ຂ ອ ງ ກ າ ຣ າ ບ າ ນ ິ ບ , ຊ າ ໂ ດ ຣ ອ ບ ກ ັ ບ ເ ບ ຍ ລ ູ ກ ິ ນ , ກ ານ ຜ ະ ຈ ິ ນ ໄ ພ
ຂ ອ ງ ໂ ຊ ໂ ຣ ກ າ ກ ັ ບ ກ າ ລ າ ເ ຕ ັ ້ ງ ໂ ກ ແ ລ ະ ສ ຽ ງ ຄ າ ງ ອ ้ ອ ຍ ອ ื ่ ນ ຂ ອ ງ ປ ่ າ
ແ ປ ກ ອ າ ບ ແ ສ ງ ແ ດ ດ ແ ລ ະ ຄ ວ າ ມ ຫ ນ ຸ ่ ມ ແ ຫ ้ ນ ຂ ອ ງ ທ ຸ ກ ຢ ่ າ ງ .

ມ າ ເ ກ ່ ັ ງ ເ ວ ລ າ ນ ั ้ ນ ພ ວ ກ ເ ຮ ົ າ ລ ืม ຄ ວ າ ມ ຂ ั ้ ນ ດ ຽ ງ ເ ປ ื ้ ອ ນ ເ ປ ิ ด ເ ຮ ื ือ ກ
ເ ຫ ົ າ ແ ລ ะ ຂ ี ้ ທ ิ ด ໄ ປ ແ ລ ้ ວ ນ ิ ຄ ົ ม ໄ ສ ສ ะ ອ າ ດ ແ ວ ວ ວ າ ວ ຢ ู ่ ท ี ่ ອ ุ ท ก บ ่ อ ม

ແລະຖ້າເຫັນວ່າຢູ່ບ່ອນໃດມັນບໍ່ຄັກບໍ່ແນ່ເຊັ່ນວ່າຢູ່ຕາມສົ້ງເສື້ອບ່ອນ
ໃກ້ຊິຂາດຫລືຫລັກຮົ້ວບ່ອນໃກ້ຊິຫັກເພເຫລົ່ານີ້ ລ້ວນແຕ່ໄດ້ຮັບ
ການສ້ອມແຊມຄືນໃຫມ່. ແມ່ນຕ່ງພັບຫນ່ວຍເກົ່ານັ້ນແລ້ວທົ່ວວ່າງ
ຢາຍກັນຢູ່ໃນຫ້ໍພັກ ແຕ່ບັດນີ້ມີລະບຽບຫ້າມບໍ່ໃຫ້ໄປນັ່ງຫລົ້ນຢູ່ໃນ
ຫ້ໍພັກໃນເວລາກາງເວັນ ເພາະຢູ່ຂ້າງນອກມີແປ້ນມ້ວາງຢາຍສໍາລັບ
ນັ່ງຫລົ້ນ. ໂຕະຢູ່ໂຮງອາຫານເຊົ່ງເຮັດດ້ວຍໄມ້ແປກຕິເກົ່າກ໊ືກຊຸດ
ກູທຸກມ໊ືດ້ວຍເຫລັກຊຸດທ່ີເຮັດຂ໊ືນສະເພາະຢູ່ໃນໂຮງຕີເຫລັກ ຂອງ
ພວກເຮົາເອງ.

ໃນເວລານັ້ນ ໂຮງຕີເຫລັກໄດ້ປະສົບກັບການປ່ຽນແປງຢ່າງ
ຫລວງຫລາຍແລ້ວ. ແຜນການອັນເລ໊ກແລບຄົມຂອງ ກາ
ລີນາ ອີວາໂນວິດ ກາຍເປັນຄວາມຈ໊ິງຢ່າງເຕັມສ່ວນແລ້ວ. ໂກໂລ
ວັນກ໊ືກໄລ່ອອກຍ້ອນເມົ້າເຫລົ້າ ແລະຍ້ອນການສົນທະນາໂອ້ລົມ
ກັບລູກຄ້າແບບຝືນປະຕິວັດ. ມັນຮອດບໍ່ພະຍາຍາມປົກປ້ອງຄຸ້ມ
ຄອງເຄ່ືອງມ໊ືຂອງມັນໄວ້ ເພາະຮູ້ດີວ່າ ບໍ່ມີທາງທ່ີຈະເຮັດໄດ້ແລ້ວ
ຈ່ຶງຊັ້ນເມ່ືອຕອນຈະຫນີຈາກໄປ ມັນກໍພຽງແຕ່ ແກ່ວ່ງຫ້ວ໊ືອກ໊ືງ
ດ້ວຍທ່າທ່ີບ່ົ້ງບອກວ່າ ເຍາະເຍ້ີຍແບບແສບໃຈທ້ົ້ງເວ້ົ້າວ່າ:

-ເອົ້າລະ... ພວກເຈ້ົ້າເປັນນາຍ ຄ໊ືພວກທ່ີເປັນນາຍທ້ົ້ງຫມົດ
ນັ້ນລະ. ປຸ້ນສະດົມຂ້ອຍແລ້ວ. ກະເປັນນາຍ!

ແຕ່ເບຍລູກິນ ບໍ່ແມ່ນຄົນປະເພດທ່ີຈະຫວ່ັນໄຫວຕໍ່ຄໍາເວ້ົ້າແບບ
ນ້ົ້ງ່າຍໆ, ການທ່ີຫມໍໄດ້ອ່ານປ໊ຶ້ມມາຫລາຍ ແລະໄດ້ທ່ອງທ່ຽວມາ
ພໍແຮງແລ້ວນັ້ນ ນັບວ່າມີປະໂຫຍດສົມຄວນ. ຫມໍຫົວໃສ່ຫ້ົ້ນ
ໂກໂລວັນຢ່າງຊ໊ືນບານທ້ົ້ງເວ້ົ້າວ່າ:

- ໂຊຟຣີ... ເຈົ້ານ້ັ້ງວ່າບໍ່ຮູ້ຈັກຕື່ນຕົນຈັກຫນ້ອຍເນາະ! ປີ ປາຍແລ້ວເດ້ ທີ່ເຈົ້າມາເຮັດວຽກນຳພວກເຮົາ ແລ້ວເຈົ້າຍັງບໍ່ເຂົ້າໃຈ ວ່າ ອັນຫມູ່ນີ້ນັ້ນແມ່ນອຸປະກອນການຜະລິດ.

- ກະ... ກະແມ່ນຊັ້ນຕ່ວາ. ຂ້ອຍວ່ານະ...

- ເຈົ້າເຂົ້າໃຈວ່າອຸປະກອນການຜະລິດນັ້ນ ຕາມຫລັກວິທະ ຍາສາດແລ້ວ, ມັນຕ້ອງເປັນຂອງຊາວກຳມາຊີບ... ແລ້ວຊິນຊັ້ນກຳ ມາຊີບ ເຈົ້າເຫັນບໍ່ລະ? ຢູ່ຕໍ່ຫນ້າເຈົ້ານີ້ເດ້.

ແລ້ວຫມໍກໍຊີ ຕົວແທນທົ່ມຊົ່ວດຊົ່ວຢູ່ແທ້ໆຂອງຊິນຊັ້ນກຳມາ ຊີບຜູ້ຊະນະເລີດໃຫ້ອີກຝ່າຍຫນຶ່ງເບິ່ງນັ້ນຄື: ຊາໂດຣອບ, ແວກ ຊະເນັບ ແລະກູຊະມາ ເລຊີ.

ຢູ່ໂຮງຊ່ວງຕີເຫລັກແມ່ນເຊມີຍາ ບອກດາເນັນໂກ ຜູ້ສືບເຊື້ອ ສາຍຈາກຄອບຄົວຊ່ວງຕີເຫລັກແທ້ເປັນຜູ້ບັນຊາວຽກງານ. ຊື່ສຽງ ຂອງຄອບຄົວເຂົາກ້ອງກ້ອງວານກະຈາຍ ໄປຮອດໂຮງຊ່ວງສ້າງທາງ ລົດໄຟ. ເຂົາວາງກົດລະບຽບເຄັ່ງຄັດປານວິໄນທະຫານໄວ້ປະຕິບັດ ພາຍໃນເຂດຄຸ້ມຄອງຂອງເຂົາແລະຮັກສາຄວາມສະອາດໄດ້ດີ ຢ່າງບໍ່ ມີອັນໃດປຽບ. ເຄື່ອງຫນີບ, ຄ້ອນຕີບໍ່ວ່ານ້ອຍຫລືໃຫຍ່ ວາງປະ ຈຳຢູ່ບ່ອນໃຜບ່ອນມັນສະເຫມີ, ພື້ນດິນຫ້ອງແປນກ້ຽງ ພໍປານຢູ່ ໃນເຮືອນຂອງແມ່ເຮືອນຜູ້ດຸຫມັ່ນ ບໍ່ມີກ່ານໄຟຕົກຈາກເຕົາພໍ້ກ້ອນ ແລະຄຳເວົ້າຂອງເຂົາກັບລູກຄ້າກໍສັ້ນແລະຈະແຈ້ງສະເຫມີ:

- ຢູ່ຫນີ... ບໍ່ແມ່ນຢູ່ວັດເດີ... ບໍ່ມີຫຍັງຊິໃຫ້ຕໍ່!

ເຊມີຍາ ບອກດາເນັນໂກ ໄດ້ຮັບການສຶກສາພໍສົມຄວນ ເຂົາ ໂກນຫນວດເຄົ້າກ້ຽງສະເຫມີແລະບໍ່ເວົ້າຄຳຫຍາບຊ້າຈັກເທື່ອ.

ໂຮງຈ່າງຕີເຫລັກມີວຽກງານເຮັດຫລາຍຈົນກ້ວມຫົວຟຸ້ນລະ , ໃນສະໄຫມນັ້ນ ໂຮງຈ່າງອື່ນໆເກືອບຢາກວ່າຢຸດກິດຈະການໄປແລ້ວ ແຕ່ໂກເຊຍກັບເດັກນ້ອຍອີກສອງຄົນ ຈ່ອຍກັນເຮັດວຽກຕໍ່ໄປຢູ່ໃນໂຮງລິດນ້ອຍ ເພື່ອເຮັດລໍ້. ຄວາມຮຽກຮ້ອງຕ້ອງການໃນກົງລໍ້ ກວຽນຍັງບໍ່ມີທ່າທີວ່າຈະຫລຸດຜ່ອນລົງເລີຍ.

ພວກເຮົາຕ້ອງເຮັດຕົ້ນກວຽນຊະນິດພິເສດສຳລັບໃສ່ຢາງໃຫ້ແກ່ອົງການກວດກາກຳມະກອນແລະຊາວນາ, ໂກເຊຍບໍ່ເຄີຍເຮັດກົງແນວນີ້ຈັກເທື່ອ. ຜະລິດພັນສີ່ໄລສະຫລອກກ່ອນນີ້ ເຮັດໃຫ້ເຂົາວຸ້ນວາຍໃຈຫລາຍ, ຫລັງຈາກເລີກວຽກໃນຕອນແລງ ເຂົາມາຈົ່ມພຸມໆວ່າ:

-ພວກເຮົາບໍ່ເຄີຍຮູ້ບໍ່ເຄີຍເຫັນຢາງໃສ່ລົ້ມແບບນີ້ ຈັກເທື່ອ. ພະເຍຊູເຈົ້າພະອົງ... ຢາງຕົນເປົ່າ... ສາວກຂອງພະອົງກະຄົນ... ແລ້ວບັດນີ້ຄົນເຮົາຊ້ຳບໍ່ພໍໃຈນຳຕົນເຫລັກ. .

ກາລິນາ ອີວານໂນວິດ ເວົ້າໃສ່ລາວຮ້າຍໆວ່າ:

-ແລ້ວທ່ານລິດໄຟຫັ້ນເດ້? ລິດໂອໂຕເດ້? ເຈົ້າຊິວ່າແນວໃດ? ມັນກ່ຽວຫຍັງກັບເຈົ້າລະຄັນວ່າ ພະເຍຊູເຈົ້າຢ່າງຕົນເປົ່າໄປນະ ເປັນແນວນັ້ນແປວ່າພະອົງບໍ່ມີລັດທະນະທຳເດີ, ເປັນຄົນບ້ານນອກຄືຫົວເຈົ້າຫັ້ນລະ ແຕ່ບາງທີການທີ່ເພິ່ນຢ່າງໄປແນວນັ້ນກໍຍ້ອນວ່າເພິ່ນເປັນຄົນຂໍທານບໍ່ຈັກດອກເນາະ ຄັນມີໃຜຈັກຄົນຈອດໂອໂຕຮັບເອົາເພິ່ນຂຶ້ນຂີ່ລິດໄປ ເພິ່ນກະຄືຊິພໍໃຈຢູ່ດອກຊິຢ່າງໄປຊັ້ນຫວາ... ອ໊ຶ, ເກົ້າຊ່ຳນີ້ແລ້ວຍັງເວົ້າແບບນີ້ຢູ່ເປັນຕາອາຍເວີ້ຍ!

ໂກເຊຍຫົວອາຍໆ ແລະຈົ່ມພຸມໆຟັງເຂົ້າໃຈຍາກວ່າ:

- ໂອ້ຍ ຄັນວ່າຂ້ອຍໄດ້ເຫັນວ່າ ມັນຕັ້ງມັນຕໍ່ກັນແນວໃດແດ່ກະ ໄຄ ອັນລ້ໃສ່ຢາງນີ້ເກາະ ກະພໍຊິເຮັດໄດ້ຢູ່ດອກ ກ້າພະເຈົ້າຊິເມດ ຕາ ແຕ່ຊິໃຫ້ໄລ່ດ໊ອທໍ່ໃດ... ອັນນີ້ຕ... ພະເຈົ້າເທົ່ານັ້ນແລ້ວທໍ່ຈະ ຮູ້ໄດ້?

- ເຈົ້າເຂົ້າໄປໃນເມືອງຫາອີ່ງການກວດການກຳມະກອນຊາວນາ ຈັກເທື່ອຊັ້ນຕ່ວ ແລ້ວນັບເບິ່ງຈຳນວນດ໊ວລ໌.

- ຟ້າເອີ້ຍ! ແລ້ວເຈົ້າຊິໃຫ້ຂ້ອຍຜູ້ເກົ້າຜູ້ແກ່ແບບນີ້ໄປຊອກ ໂຮງການທໍ່ວ່ານີ້ຈັ່ງໃດລະ?

ຕິກມາຮອດລະຫວ່າງການເດືອນເມສຸນ ແຊກແມັນໂກ ຄິດ ມ່ວນຢາກໃຫ້ເດັກນ້ອຍນິຄົມມີອັນເບີກບານຈ່ຳບອກວ່າ:

- ຂ້ອຍໄດ້ລືມກັບຄົນຜູ້ຫນຶ່ງໄວ້ແລ້ວ ຢູ່ຫນີ້ມີຄະນະລະບຳບາເລ ຄະນະຫນຶ່ງຈະໄປສະແດງໃຫ້ພວກເດັກນ້ອຍເບິ່ງ. ພວກເຮົາມີສາວ ນັກເຕັ້ນບາເລເກ໋ງໆຫລາຍຄົນ ເປັນຄົນຈາກໂຮງມະໂຫລະສົບຂອງ ພວກເຮົາເອງ! ເຈົ້າເຊີນເອົາພວກເຂົາໄປພຸ້ນຈັກຄືນເນາະ.

- ກະດີລະບໍ.

- ມີແຕ່ວ່າ ຕ້ອງລະວັງແດ່ຈັກຫນ້ອຍ. ຄົນພວກນີ້ຜ່ອຍບາງ ຫລາຍເດ໊... ຢ່າໃຫ້ພວກໂຈນມາເຮັດຫຍັງໃຫ້ພວກນາງແຕກຕື່ນ ລະ ເອ໊ີແລ້ວເຈົ້າຊິເອົາພວກເຂົາໄປແນວໃດລະຫນີ?

- ພວກເຮົາມີກອງນ້ຳຄົບເຄື່ອງ...

- ຂ້ອຍເຫັນມັນແລ້ວລະ... ຢ່າເລີຍ! ສິ່ງແຕ່ນ້ຳຫັ້ນຊາມາ ທຸ່ງມກອງນຂ້ອຍ... ບາດແລ້ວຈັ່ງໄປຮັບພວກນັກສະແດງແລ້ວກະ ເບິ່ງແຍງຫົນທາງແດ່ເດ໊ ບໍ່ຊັ້ນຊິມີຄົນສວຍໂອກາດລະ... ຄົນພວກ ນັ້ນມີສະເຫນແຮງຫລາຍໃດ.

ນັກລະບຳບາເລ ມາຮອດນິຄົມພວກເຮົາອ່າວຄ່ຳ, ຂະເຈົ້າສັ່ນເຊັນມາຕະຫລອດທາງ ເບິ່ງເປັນຕາຫົວສຳລັບອານໂຕນ ຜູ້ພະຍາຍາມອົ່ນອ່ອຍໃຫ້ຄວາມຫມັ້ນໃຈແກ່ຂະເຈົ້າວ່າ:

- ບໍ່ມີຫຍັງເປັນຕາຢ້ານດອກ. ພວກເຈົ້າບໍ່ມີຫຍັງເປັນຕາລັກເລີຍ ມັນບໍ່ແມ່ນລະດູຫນາວແລ້ວ, ໃນຍາມຫນາວຫັ້ນເກາະ ເຂົາປຸ້ນເອົາເສື້ອໃຫຍ່ທໍ່ນັ້ນລະ!

ຫນ່ວຍກວດກາຍາມຫົນທາງຂອງພວກເຮົາໂປໂລອອກຈາກປ່າ ເປັນຄັ້ງຄາວແບບກະທັນຫັນ ເຮັດໃຫ້ພວກສາວນັກເຕັ້ນລະບຳຫົວໃຈສັ່ນຂຶ້ນອີກ, ຈັ່ງຊັ້ນເມື່ອມາຮອດນິຄົມ ຈົ່ງຕ້ອງເອົາຢາບຳລຸງຫົວໃຈໃຫ້ຂະເຈົ້າກິນໃນທັນທີ.

ພວກເຂົາເຈົ້າພ້ອມດ້ວຍຄວາມຈຳໃຈສຸດຂີດ. ພວກເດັກນ້ອຍບໍ່ມີກາມສະແດງເລີຍ. ນາງຄົນຫນຶ່ງອາວຫນຸ່ມກວ່າທ່ານໝໍ, ຜິວກ່ຳແດດຈົນເຫັນໄດ້ຄັກ, ນາງສະແດງຕົວອອກຢ່າງເປີດເຜີຍວ່າຢູ່ຄົນລະຊັ້ນກັບຊາວນິຄົມ ແລະກໍບໍ່ສົນໃຈໄຍດີ ແມ່ນແຕ່ຫນ້ອຍດຽວຕໍ່ນິຄົມທັງຫມົດ. ອີກນາງຫນຶ່ງອ່ຳແກ່ກວ່ານັ້ນ ຈ້ອງເບິ່ງພວກເຮົາດ້ວຍແສງຕາແຝງຄວາມຫວາດກົວ. ທ່າທີຂອງນາງເຮັດໃຫ້ອານໂຕນ ໂມໂຫຂຶ້ນຫລາຍກ່ວາຫມູ.

- ເຮ້ຍ... ຫມູ ເວົ້າແທ້ເວົ້າດີ, ສູວ່າມັນສົມຄວນຊິຕີມ້າແລ່ນຮອດສອງຫລິບກັບເຂົ້າໃນເມືອງບໍ່? ກູຊິເອົາມາໃຫ້ສູເອງກະຍັງໄດ້ນ່າ... ຄັກກ່ວານີ້ແລ້ວກະຢ່າງມາເອງ... ຊິເອົາຊ່ຳໃດກະຍັງໄດ້!

- ແຕ່ນັກພ້ອນຂອງໂຕຊິບໍ່ພ້ອນແນວນີ້ນັ້ນຕິ! - ຊາໂດຮອບເວົ້າທັງຫົວ.

- ໂອ້... ອັນນັ້ນກະບໍ່ຮູ້ແຫລ້ວ!

ເອົາກາເຕີຣົນາ ກຣົ໊ກເຣັບນາ ນັ່ງຫລົ້ນເປຍໂນ ເຊົ່ຖ້ຳເອ້ປະ ດັບຫ້ຳພັກຂອງພວກເຮົາມາແຕ່ດົນແລ້ວ. ນາງຫລົ້ນບໍ່ເກັ່ງປານໃດ ສຽງດົນຕີຂອງນາງບໍ່ເຫມາະກັບການເຕັ້ນລະບຳ ແລະພວກສາວນັກ ເຕັ້ນກໍ່ບໍ່ມີສິນລະປະພໍທີ່ຈະປິດບັງບາດພ້ອນອັນຜິດພາດ ຫລືວ່າສະ ແດງຕໍ່ໄປຈັກສອງສາມຈ້ຳຫລະ ພວກນາງສະແດງລະບຳດ້ວຍທ່າທີ ບໍ່ພໍໃຈແຮງທີ່ຕ້ອງມາເຕັ້ນໃສ່ສຽງດົນຕີແບບຂາດຕົດຂາດຕອນ ແນວ ນັ້ນ, ນອກນັ້ຍັງພ້ອຍາກກັບຄືນຈິນໃຈຊິຂາດອີກ ເພື່ອໄປສະແດງຕໍ່ ຢູ່ບ່ອນອື່ນທີ່ຫນ້າສົນໃຈກ່ວາ.

ເມື່ອເອົາມ້າມາທຽມກວຽນຢູ່ທ່າມກາງແສງສະຫວ່າງຂອງ ໄຟ ແລະສຽງຈົ່ມດ່າພຸມໆຂອງອານໂຕນນັ້ນ ພວກສາວນັກເຕັ້ນຢູ່ໃນ ສະພາບອຸ່ນວາຍຈິດໃຈຍິ່ງຫນັກ ແນ່ນອນວ່າພວກເຂົາຈະໄປຮອດ ບ່ອນສະແດງໃຫມ່ຊັກຊ້າ. ຄວາມຄະນ່າແລະຄວາມຮູ້ສຶກຫມົ່ນປະ ຫມາດຕໍ່ນົ້ຄົນທີ່ອາບຈົນຢູ່ທ່າມກາງຄວາມມືດມົດ, ຕໍ່ພວກເດັກ ນ້ອຍຜູ້ງ່ນສະຫງັດ, ຕໍ່ສັງຄົມອັນນີ້ ທີ່ເປັນສິ່ງແປກໃຫມ່ທີ່ສຸດສຳ ລັບພວກນາງ ທັ້ງຫມົດນີ້ເຮັດໃຫ້ພວກນາງປາກບໍ່ອອກ ພໍພຽງແຕ່ ຄາງອຸ່ມໆ ແລະແຫຍ້ຫມັ້ນເຂົ້າຫາກັນຕື່ມ. ໂຊໂຣການັ່ງຢູ່ເທິງອານ ຄົນຂັບ ຈົ່ມວ່າທັ້ງເອົາແສ້ຟາດໄປມາ ແລະຮ້ອງລົ່ມມາວ່າຊິບໍ່ຂັບ ກວຽນມ້າ. ອານໂຕນ ນັ້ນບໍ່ຮ້ອນບໍ່ເຄືອງວ່າມີພວກນັກເຕັ້ນຢູ່ນຳ, ເຂົ້ຮ້ອງຕອບວ່າ:

- ໂຍ້ວ... ມຶ່ງເປັນຫຍັງຊັ້ນນ່າ? ເປັນຄົນຂັບກວຽນຫລືນັກ

ເຕັ້ນເວ້ຍ? ແລ້ວເປັນຫຍັງຈ໋ຳເຕັ້ນແຮ້ງເຕັ້ນກາຢູ່ເທົ່ງຄອນພຸ້ນ ລະ? ຄັນວ່າບໍ່ຢາກຂັບ ກະເຊີນລົງມາ..

ໃນທີ່ສຸດ ໂຊໂຣກາ ກໍ່ກ໋ກເຊືອກບັ້ງຫຽນ ພວກສາວນັກຟ້ອນ ທ້ງສັ່ນທ້ງເຊັນພາກັນແນມນ໋ຳປືນຍາວທີ່ຫມໍພາຍໄວ້ທາງຫລັງດ້ວຍ ຄວາມຮູ້ສຶກເຢັນວາບໃນສັນຫລັງ. ລ໋ຳກອງນກະຕຸກບາດຫນ໋ຶ່ງເພື່ອ ເຄື່ອນທີ່ແຕ່ ບຮາເຊັນໂກ ຮ້ອງມາໃສ່ອີກວ່າ:

-ບັກຈ້າ ແມ່ນ໋ຶງເຮັດຫຍັງໄວ້ຫ໋ໍ? ມ໋ຶງປ່ວງແລ້ວຫວະ ຈ໋ຳ ເອົາມ້າມັດໃສ່ກອງນແບບນ໋ີ? ມ໋ຶງເອົາບັກແດງໃສ່ໃສ? ມ໋ຶງຜູກແບບ ໃດຫນ໋ີ? ແກ້ແລ້ວຜູກໃຫມ່... ກູບອກແລ້ວວ່າຕ້ອງໃຫ້ບັກມ໋ຶນລ້ຽງ ຢູ່ເບ໋ຶ້ອງຂວາ ມ໋ຶສະເຫມ໋ີ... ບອກຈັກເທ໋ື່ອແລ້ວຮ໋ຶ?

ໂຊໂຣກາຄ່ອຍໆດ໋ຶງປືນຍາວອອກໄປວາງໄວ້ ຊ໋ຶ່ປາຍຕີນພວກສາວ ນັກເຕັ້ນລະບ໋ຳ. ມ໋ີສຽງກັ້ນສະອ໋ຶ້ນຄ່ອຍໆດັງລອດລົງມາແຕ່ເທົ່ງກະ ບະກອງນ.

ກາຣາບານ ເວ້ົາຢູ່ທາງຫລັງຂ້ານ້ະເຈ້ົາວ່າ:

-ເອົາລະໃນທ໋ີ່ສຸດພວກເຮົາກໍ່ແກ້ແຄ້ນພວກເຂົາໄດ້ ຂ້ອຍໂລດ ຄິດວ່າ ຊ໋ີເຮັດບໍ່ໄດ້ຕ໋ີ ຊ໋ຶມເຊ໋ຍເດ໋ັ້ພ້ກພວກ!

ເວລາຜ່ານໄປປະມານ ຫ້ານາທ໋ີ ຈາກນ໋ັ້ນກອງນຈ໋ຳເລ໋ີ່ມເຄ໋ື່ອນ ຕ໋ີອອກເດ໋ີນທາງ. ພວກເຮົາຍ໋ກມ໋ຶ້ຂ໋ຶ້ນແຕະປາຍຫມວກເ໋ງ໊ບຄ່ອຍໆ ຢ່າງອາຍໆໂດຍບໍ່ຫວັງວ່າ ຈະໄດ້ຮັບການຕອບສະຫນອງແຕ່ຢ່າງໃດ. ລ້ຽງເຕັ້ນໄຕ່ເຍາະຍ້ອນໄປຕາມທາງປູຫ໋ີນແລ້ວ ແຕ່ໃນເວລານ໋ັ້ນ ເອງ ເ໋ງົາດ໋ຳຄ໋ິດ໋ຳເ໋ງົາຫນ໋ຶ່ງກໍ່ຜ່ານແວບກາຍຫນ້າພວກເຮົາໄປເພ໋ື່ອ ຕ໋ິດຕາມກອງນ ນ໋ັນກ໊ອກແຂນນ໋ຳວ໋ັບໆທ້ງຮ້ອງສຽງເຫລ໋ືອ່ວ:

- ยุดก่อน! ยุดก่อน, ฟ้าเอ๊ย ขໍนำเทาะ... พวกเจ้าเอ๊ยยุดก่อน!

ไอโธกา รู้สึกวิงวัน ถึงเอื๊อกบ้างหงนไว้, สาวนักเต้นละบำถืบหนึ่ง ลุกโย่งโย้จากตั่งนั่ง.

- ข้อยลืมไป โอย... ฟ้าเอ๊ย. อะไพผู้ข้าท้อน! ให้ข้อยนับเบิ่งถือกิ่งล้ำกองนแด่!

ลาวกั้มลิงเบิ่งกิ่งล้ในขะนะที่มีสงสะอื้นไห้เป็นบางๆ ดังลอดลิงมาแต่กะบะกองน จากนั้นจึ่งมีสงอ่อยดังอุ่มๆตื้มใส่อ่า:

- มึดเทาะบ่า... บ่มีหยังดอก.

ภาธาบานิบ ลุก โกเลยออกจากล้ำกองน:

- เจ้าลืออกไปดงอบี้บ่ พ่เก้า?

แต่กะโต ภาธาบานิบเองกໍอิดหิวบ่ฟังถือกัน มันร้องกึกกาวขึ้นบางหนึ่ง แล้วโดดเข้าป่าไป.

ข้าพะเจ้าเองกໍบ่สามาดอิดทินต่ไปได้อีกถือกัน:

- ไปเลีย โอโธกา... ตีม้า, แม่นมึงถือว่ายังมีเวลาเหลืออยู่หลายชั้นหวา?

ไอโธกา ฟาดแส้ลิงใส่บักมินลาง สุดอ่วงแขนพวกเด็กน้อยหิวขึ้นโดบๆด้วยดวามพໍใจ ส่วนภาธาบานิบ ยังถิงยู่ในพุ่มไม้ ส่วนอานโตน ท้างหิวท้างเว้า:

- จั่งแม่นฉิถักก่อานี้เนาะ ถันแม่นโจนแท้ๆมาลักหาๆพวกเฮานะ! ถันเป็นแนวนั้น พวกเฮาต้องไปธอดบ่อนสะแดงถืนนี้ฉ้ายๆแม่นอน.

ໂກເຊຍຍັງຄົງຈຸ່ນວາຍເຫງົາກຫງາກ ຢູ່ທ່າມກາງຫມູ່ເດັກນ້ອຍ ລາວຍັງບໍ່ເຂົ້າໃຈວ່າ ການທີ່ລາວຢາກນັບຈຳນວນດົ້ວກົ່ງລັ້ນ ມັນເປັນຫຍັງຈົ່ງກາຍເປັນເລື່ອງຮ້າຍແຮງໄປໄດ້.

ບັນຫາຍິບຍ່ອຍທັ່ງຫລາຍທີ່ເກີດຂຶ້ນ ເຮັດໃຫ້ພວກເຮົາລືມໄປ ວ່າ ບັດນີ້ກຳນົດເວລາຂອງຫນົ່ງເດືອນເຄິ່ງໄດ້ຜ່ານໄປແລ້ວ ຈັ່ງຊັ້ນ ນັ້ຫນົ່ງ ຫົວຫນ້າເສດຖະກິດຂອງອົ່ງການກວດກາກຳມະກອນຊາວ ນາຈົ່ງມາຫາພວກເຮົາຕາມວັນເວລາກຳນົດນັ້ນແທ້ໆ.

- ນ້ຳຂອງພວກເຮົາເປັນແນວໃດແດ່?

- ຢູ່ດີມີແຮງທຸກຕົວ.

- ແລ້ວນ້ຳໃດພວກເຈົ້າຊີ້ສົ່ງຄືນລະ?

ອານໂຕນ ຫນ້ານ້ານລົ່ງທັນທີ:

- ສົ່ງພວກນັ້ນແລ້ວ ຊີໃຫ້ໃຜ... ນ້ຳໂຕໃດມາເຮັດວຽກແທນ ລະ?

- ສະຫາຍ, ເວົ້ານັ້ນຕາມສັນຍາເດ໊! ຫົວຫນ້າຫນ່ວຍເສດຖະ ກດເວົ້າດ້ວຍນ້ຳສຽງແຂງກະແດ້ງ. - ແລ້ວເຂົ້ານ້ະເລເດ້ ປານໃດ ຈົ່ງຊີໄດ້?

- ເຂົ້ານ້ະເລຫວະ? ຍັງຢູ່ໃນທົ່ງພຸ້ນ, ທຳອິດກະຕ້ອງກ່ຽວຕ້ອງ ຟາດນັ້ນກ່ອນລະນໍ.

- ແລ້ວລ້ຳວຽນຂ້ອຍເດ້?

- ສຳລັບເລື່ອງນັ້ກ໋ນັ້ນຫາອີກ, ຊ່າງເຮັດລ້ຳຂອງພວກເຮົາບໍ່ ທັນໄດ້ນັບດ໊ອລ໋ເທ໊ອ ລາວໂລດບໍ່ຮູ້ວ່າຕ້ອງໃສ່ທ່ໍໃດ ແລ້ວກະຍັງຂະ ຫນາດນັ້ນອີກ...

ຄູ່ສົນທະນາຂອງພວກເຮົາກ໊ຕົນວ່າ ເປັນບຸກຄົນມີກຽດໃຫຍ່ ຫລາຍເມື່ອທຽບໃສ່ກັບຄົນຢູ່ນິຄົມ ກະຂອງວ່າລາວເປັນຮອດຫົວ ຫນ້າເສດກະກ໊ດຂອງອົງການກວດການກຳມະກອນ ແລະຊາວນາ ເນາະ!

- ພວກເຈົ້າຈະຕ້ອງຈ່າຍຄ່າເສຍຫາຍຕາມສັນຍາ, ສັນຍາຕ້ອງ ເປັນສັນຍາ! ນັບແຕ່ມື້ນີ້ເປັນຕົ້ນໄປເລີຍ, ພວກເຈົ້າຄົງຮູ້ດີວ່າຕ້ອງ ຈ່າຍເຂົ້າໃຫ້ພວກເຮົາ ๕ ກິໂລຕ່ໍ້ມື້, ແປ້ງສາລີ ๕ ກິໂລ, ເຮັດ ຈັ່ງຊັ້ນເດ໊.

ວ່າແລ້ວລາວກໍຈາກໄປ ບຮາເຊັນໂກແນມນຳລົດມ້າຂອງລາວ ດ້ວຍແສງຕາແຄ້ນເຄືອງແລ້ວອຸທານສັ້ນໆວ່າ "ບັກແຮດເອ໊ຍ!"

ພວກເຮົາຄ໊ດອຸກ໊ດອັ່ງຫລາຍ ມັນຈຳເປັນແທ້ໆທ໊ີ່ພວກເຮົາຈະ ຕ້ອງມີມ້າ, ແຕ່ຍ້ອນເຫດນ໊ີ້ຊ້ຳພ້ ດຕ້ອງສູນເສຍຜະລ໊ດຜົນກະສ໊ກຳ ໄປຫມ໊ດ!...

ກາລີນາ ອ໊ອາໂນອ໊ດ ຈົ່ມພຸມໆວ່າ:

- ຈ້າງກູກະບໍ່ໃຫ້ເຂົ້າບະເລມັນພໍເມ໊ດ. ນ່າ ພວກຜາກ ຄ໊ດເບິ່ງ ເອົາເທາະ ๑๕ ປູດຕ່ໍ້ເດ໊ອນແລ້ວບ໊ດນ໊ີ້ຍັງຊ໊ເອົາອ໊ກ ๕ ກິໂລຕ່ໍ້ມ໊ ອ໊ກ. ພວກເຂົາໂລດຂຽນໄວ້ຫມ໊ດທຸກອັນທຸກແນວແລ້ວໃນເຈ້ຍໃບ ນັ້ນນະ ແຕ່ຕ໊ອຈ໋ງໂລດແມ່ນພວກເຮົາພ໊ີ້ປູກເຂົ້າ, ຊ້ຳບໍ່ພ້ຍັງຊ໊ຍ໊ກ ໃຫ້ເຂົາໄປຫມ໊ດ ໂຮມທ໋ງມ້ານ້ຳເຊ໊ນໂລດແລ້ວ! ມັນຊ໊ໄປເອົາ ທ໋ງໃດ ກະເຊ໊ນໂລດ. ແຕ່ຢ່າຫວັ ງວ່າຊ໊ໄດ້ນ້ຳກູເດ໊!

ພວກເດ໊ກນ້ອຍເອ໋ງກໍຄ໊ດຄ້ານ ການປະຕ໊ບ໊ດຕາມຂ້ໍສັນຍາ.

- ຄັນວ່າຊ໊ຕ້ອງເອົາຜົນເກັບກ່ຽວໃຫ້ພວກເຂົາຫມ໊ດ ແຫນ໋ງວ່າ

ປ່ອຍໃຫ້ເຂົ້າຕາຍແຫ້ງໃນທົ່ງດີກ່ວາ. ກ້າເຂົາຊິເອົາເຂົ້າກໍເອົາ ແຕ່ຕ້ອງປະມ້າໄວ້ໃຫ້ພວກເຮົາ.

ບຮາເຊັນໂກ ຈັດການແກ້ບັນຫາແບບປະນີປະນອມກ່ວາຫມູ່:

-ພວກເຈົ້າອາດຈະເອົາເຂົ້າບະເລ, ເຂົ້າໂອ໊ດແດ່ໃຫ້ເຂົາ, ມັນຝະລັ່ງຕົ້ມອີກກໍຍັງໄດ້ ແຕ່ສໍາລັບມ້າ ຂ້ອຍບໍ່ຍອມດອກ ຕໍ່ໃຫ້ພວກເຂົາມາຮ້ອງມາໂຮຈົນຄໍແຕກ ຈ້າງກະບໍ່ໄດ້ມ້າຄືນ.

ຕົກຮອດເດືອນກໍລະກົດ ພວກເດັກນ້ອຍລົງກ່ຽວຫຍ້າຢູ່ໃນທົ່ງ, ກາລິນາ ອີວາໂນວິດ ແລ່ນມາຫນ້າຕາຕື່ນເຕັ້ນຫນ້າຕົກໃຈ.

-ບໍ່ໄຫວດອກ... ພວກເດັກນ້ອຍກ່ຽວບໍ່ເປັນ, ແລ້ວຊິເຮັດແນວໃດລະຫນໍ ບາດເກືຍມກ່ຽວເຂົ້າ, ຂ້ອຍໂລດບໍ່ຮູ້ຈະເຮັດຫຍັງໃດຫນໍ. ເຂົ້າໂອ໊ດຕັ້ງ ໑໐ ເດເຊຍຕິນພຸ້ນນ່າ, ເຂົ້າບະເລຍາມໃບໄມ້ຫລົ່ນ ๕ ເດເຊຍຕິນ ຍັງເຂົ້າບະເລລະດູບານໃຫມ່ກັບເຂົ້າອາວອນອີກ... ຊິເຮັດແນວໃດຕ້ອງມີຈັກກ່ຽວ... ຈົ່ງຊິໄດ້.

-ກາລິນາ ອີວາໂນວິດ ເຈົ້າເວົ້າຫຍັງ? ຊິເອົາເງິນມາແຕ່ທາງໃດ?

-ຊັ້ນກະເອົາແຕ່ຈັກກ່ຽວແນວກ໊ຶກໆກໍໄດ້, ແຕ່ກ່ອນລາຄາມັນກະປະມານ ๑๕๐ ຫາ ๘๐๐ ຮຸບປານນັ້ນລະ.

ແລ້ວຫົ໊ຫນໍ ລາວກໍາເມັດເຂົ້າໂອ໊ດມາໃຫ້ຂ້າພະເຈົ້າເບິ່ງ.

-ເຈົ້າເບິ່ງຕິຫນໍ, ມັນພໍກ່ຽວແລ້ວໃດ໋, ວ່າຢ່າງຊ້າບໍ່ໃຫ້ກາຍສອງມ໊ື.

ພວກເຮົາກະກຽມວ່າຈະລົງມືກ່ຽວເຂົ້າໂອ໊ດດ້ວຍກ່ຽວດ້າມຍາວ ແລະຕົກລົງທໍາພິທີເຮັດບຸນເກັບກ່ຽວເຂົ້າຢ່າງມ່ວນຊື່ນ. ທົ່ງນາ

ຂອງພວກເຮົາເປັນດິນຜົງ ແລະຮ້ອນອຸ່ນດີ, ເຂົ້າໂອ໊ດເກີດໄວ ຈັ່ງ ຊັ້ນ ຈຶ່ງເປັນໂອກາດອັນດີສຳລັບຈັດຕັ້ງບຸນມະໂຫລານຄັ້ງນີ້ຫລາຍ. ພວກເຮົາເຊີນແຂກມາຮ່ວມເປັນຈຳນວນຫລາຍ, ແຕ່ອາຫານ ພິເສດສຳລັບວັນບຸນ, ຈັດລຳດັບພິທີບຸນໃຫ້ມີຈັ່ງຫວະເຫມາະສົມ ແລະເດັ່ນ: ປະຕູໄຊແລະຜືນທຸງປະດັບຍັ່ງຍາຍໄປທົ່ວທົ່ງແລ້ວ, ເຄື່ອງນຸ່ງຊຸດໃຫມ່ສຳລັບເດັກນ້ອຍ ກະກຽມໄວ້ຮຽບຮ້ອຍ ແຕ່ ກາ ລືນາ ອີວາໂນວິດ ຊ້ຳອຸກອັ່ງຢ່າງຫນັກຫນ່ວງຢູ່.

-ເຫມິດເອົາຊື່ໆ... ເຂົ້ານະ ເຂົ້າໂອ໊ດຊິຫລົ່ນກົ້ມກ່ອນກ່ຽວ ແລ້ວ, ເຮັດນາ້ງນິກນ້ຽງກາ້ງໆ.

ແຕ່ພວກເດັກນ້ອຍ ທີ່ພວມຝົນແລະແປງກ່ຽວດ້ວຍມຍາວຂອງ ພວກເຂົາຢູ່ໃນໂຮງລິດພາກັນເວົ້າອອຍໃຈຜູ້ເກົ້າວ່າ:

-ບໍ່ເຫມິດດອກນ່າ... ກາລືນາ ອີວາໂນວິດ, ທຸກຢ່າງຈະ ເປັນໄປຢ່າງຮຽບຮ້ອຍບໍ່ຕ່າງຫຍັງກັບວ່າ ພວກເຮົາເປັນຊາວນາ ຟຸ້ນ ລະ!

ເລືອກນັກກ່ຽວເຂົ້າໄດ້ແປດຄົນແລ້ວ.

ໃນກະໂຕມ໊ືບຸນນັ້ນເອງ, ອານໂຕນປຸກຂ້າພະເຈົ້າລຸກແຕ່ເຊົ້າ:

-ມີພໍ່ເກົ້າຫນ໋ຶງເອົາຈັກກ່ຽວມາຫາພວກເຮົາ.

-ຈັກກ່ຽວອັນໃດ?

-ລາວເອົາມານຳອັນຫນ໋ຶງ. ສະພາບດີ... ປີກປົ່ນຄົບກ້ອນ. ລາວຖາມວ່າພວກເຮົາຊິບໍ່ຢາກຊື້ໄວ້ແດ່ບໍ່ ວ່ານັ້ນ.

-ເຊີນມ໋ຶງໄປທາງອື່ນ, ເຮົາຊິເອົາເງິນທາງໃດໄປຊື້... ມ໋ຶງກະ ຮູ້ຢູ່ແລ້ວ...

-ບໍ່ຊິ ແຕ່ພວກເຮົາກະເອົາຫຍັງແລກປ່ຽນ ກະໄດ້ຕ່ະ, ລາວ ວ່າຢາກປ່ຽນກັບມ້າໂຕຫນຶ່ງ.

ຂ້າພະເຈົ້ານຸ່ງເຄື່ອງແລ້ວອອກໄປຍັງໂຮງມ້າ. ຢູ່ກາງເດີ່ນ ຂ້າ ພະເຈົ້າເຫັນລິດກ່ຽວຄັນຫນຶ່ງ ຍັງບໍ່ເກົ່າປານໃດ ເບິ່ງບາດດຽວກໍຮູ້ ວ່າທາສີໃຫມ່ເພື່ອຊິເອົາມາຂາຍ. ພວກເດັກນ້ອຍຫຸ້ມລ້ອມມັນຢູ່ ແລະກາລິນາ ອີວາໂນວິດ ກໍຢູ່ນຳພວກເຂົາ ລາວແນມເບິ່ງຈັກກັບ ເຈົ້າຂອງມັນ ແລ້ວເສືອກແສງຕາແບບຄົນຂີ້ໂມໂຫມາໃສ່ຂ້າພະ ເຈົ້າ:

-ແມ່ນເກົ້ານີ້ມາຈຸ້ນວາຍອີ່ສັງຢູ່ຫນີ້? ມັນມາເຍາະເຍີ້ຍພວກ ເຮົາຊັ້ນຫວະ? ແມ່ນໃຜພາມັນມາຫນີ້?

ຊາຍຊະລາເຈົ້າຂອງຈັກກ່ຽວແກ້ມ້ອອກຈາກກອງນ, ລາວ ເປັນຄົນຊົ່ງພູມກາມ ມີຫນວດເຄົາສີຫມົ້ນ.

-ແລ້ວເປັນຫຍັງເຈົ້າຈົ່ງຢາກຂາຍມັນລະ? - ປູຮູນກາມຂຶ້ນ.

ຊາຍຊະລາອ່ວຍຫນ້າມາ ແລ້ວຈົ່ງເວົ້າວ່າ:

-ຊຶກິນດອງລູກຊາຍ ຂ້ອຍມີອີກອັນຫນຶ່ງ... ໃຊ້ອັນດຽວກະ ພໍແລ້ວ ຂ້ອຍຕ້ອງການມ້າໃຫ້ລູກຊາຍ.

ກາຣາບານິບ ຊຶ່ມໃສ່ຫູຂ້າພະເຈົ້າວ່າ:

-ຂຶ້ຕ໊ວະ, ຂ້ອຍຮູ້ຈັກລາວດີ ພໍ່ເກົ້ານີ້ນ່າ... ເຈົ້າມາແຕ່ ຊະໂຕ ໂຮເຊວອຍເຢ ແມ່ນບໍ?

-ຊະໂຕໂຮເຊວອຍເຢ ຫວະ! ກືກຕ້ອງແລ້ວ, ນຶ່ງບໍ່ແມ່ນ ເຊມີຍົ່ງ ກາຣາບານິບ ລູກຂອງປານາດ ຫວະ?

-ກືກຕ້ອງທີ່ສຸດ! - ເຊມີຍົ່ງຫົວຍ້ານທັນທີ. -ຄັນຊັ້ນເຈົ້າກໍ

ແມ່ນ ໂອແມນເຊັນໂກລະຕິ? ເຈົ້າຢ້ານວ່າເພິ່ນຊິມາຍຶດຈັກກ່ຽວ ເຈົ້າແມ່ນບໍ່ລະ?

-ອັນນີ້ກໍແມ່ນເຫດຜົນຫນຶ່ງຄືກັນ, ເພິ່ນອາດຊິມາຍຶດ ແຕ່ກະ ມີດອງຂອງລູກຊາຍ...

-ອ້າວຊັ້ນມັນບໍ່ໄດ້ຢູ່ນຳພວກໂຈນແລ້ວຫວະ...

-ໂອ້ຍ... ກະບໍ່ແລ້ວ... ຟ້າເອີ!

ເຊມີຍາການາບານິບເປັນເຈົ້າການດຳເນີນການເຈລະຈາຊື້ຂາຍ ໂດຍຕະຫລອດ ພວກເຂົາຍືນລົມກັນຢ່າງຍືດຍາວ, ບາງຄັ້ງມີການ ງຶກຫົວ ຕົບບ່າໄລ່ ແລະກ້ຳມແຂນກັນ. ເຊມີຍາວ່າເປັນເຈົ້າ ກິເຈົ້າການແທ້ໆໃດ ແລະພໍ່ເກົ້າໂອແມນເຊັນໂກ ກໍຖືວ່າຫນໍເປັນ ຄົນທີ່ຮູ້ເລື່ອງຮູ້ລາວຜູ້ຫນຶ່ງ.

ຫລັງຈາກເວລາຜ່ານໄປເຄິ່ງຊົ່ວໂມງແລ້ວ ເຊມີຍາກໍໄຂກອງ ປະຊຸມລັບຂຶ້ນຢູ່ລະບຽງຫ້ອງ ການີນາ ອີວາໂນວິດ. ນອກຈາກ ກາ ລີນາ ອີວາໂນວິດ ຂ້າພະເຈົ້າແລະການາບານິບ ແລ້ວຍັງມີ ບູຮູນ, ຊາໂດຣອບ, ບຣາເຊັນໂກ ແລະເດັກນ້ອຍນິຄົມຮຸ່ນເກົ່າອີກສອງ ສາມຄົນເຂົ້າຮ່ວມນຳ ຂະນະທີ່ຜູ້ອື່ນໆພາກັນຍືນຫຸ້ມລ້ອມຮ້ອມລິດ ກ່ຽວເຂົ້າຢ່າງມິດງຽບ ທັງຮູ້ສຶກປະຫລາດໃຈແທນອິດສາວ່າໃນໂລກ ນີ້ຊ່າງມີຄົນຜູ້ທີ່ໂຊກດີມີລິດກ່ຽວແບບນີ້ຢູ່ໃນກຳມື.

ເຊມີຍາອະທິບາຍວ່າ ຊາຍຊະລາຄົນນີ້ຢາກປ່ຽນລິດກ່ຽວເຂົ້າ ຂອງລາວກັບມ້າໂຕຫນຶ່ງ ເພາະວ່າຢູ່ ຊະໂຕໂຣເຊວອຍເຢຟຸ້ນ ເພິ່ນຊິສາມາດສຳຫລວດເຄື່ອງຈັກກະສິກຳ ຈັ່ງຊັ້ນລາວຈຶ່ງຢ້ານວ່າ

ເພິ່ນຈະຍຶດເອົາເຄື່ອງລາວໄປລ້າໆ ສ່ວນວ່າມ້ານັ້ນເພິ່ນຈະບໍ່ຍຶດ ເພາະວ່າລາວຊິແຕ່ງດອງໃຫ້ລູກຊາຍຢູ່ແລ້ວ.

-ຊິແມ່ນແທ້ຫລືບໍ່ແມ່ນ ບໍ່ກ່ຽວກັບພວກເຮົາ, - ຊາໂດຣອບ ເວົ້າຂຶ້ນ, -ແຕ່ວ່າພວກເຮົາຕ້ອງການຈັກກ່ຽວທີ່ສຸດ ຊິເອົາມັນໄປ ໃຊ້ມື້ນີ້ໂລດ!

-ແລ້ວນຶ່ງຊິເອົາມ້າໂຕໃດແລກກັບລາວລະ? - ອານໂຕນ ຖາມ ຂຶ້ນ. ມ້ານັກນ້ອຍກັບອີ່ໂຈນຫັ້ນໃຊ້ການບໍ່ໄດ້ແລ້ວ, ນຶ່ງຊິຍອມເອົາ ມ້ານັກແດງໃຫ້ລາວຫວະ?

-ເອີ... ມ້ານັກແດງ ແລ້ວມັນຊິເປັນຫຍັງລະ? - ຊາໂດຣອບ ຕອບ, - ອັນນີ້ມັນຈັກກ່ຽວໃດ໋ເວີ້ຍ!

-ມ້ານັກແດງຫວະ? ໂຍ້ວນຶ່ງ...

ກາຣາບານິບ ຕັດຄວາມອານໂຕນຜູ້ໃຈຮ້ອນວ່າ:

-ບໍ່, ນັກແດງໃຫ້ບໍ່ໄດ້ດອກ ອັນນັ້ນມັນແນ່ນອນແລ້ວ, ບໍ່ມີ ມ້າໂຕໃດຄັກຄືມັນໃນນິຄົມເຮົາ ນະ ແລ້ວເປັນຫຍັງຊິເອົາມັນລະ.- ເອົານັກສີ່ກະໄດ້ຕ່ວາ. ມັນງາມສົມຄວນ ແລ້ວກະສາມາດເອົາໄວ້ ເຮັດມ້າພັນໄດ້ນຳອີກ.

ເຊມີຍົງແນມເບິ່ງ ກາລິນາ ອິວາໂນວິດ ດ້ວຍສາຍຕາຫລັກ ແຫລມ.

ກາລິນາ ອິວາໂນວິດ ບໍ່ຕອບມັນແຕ່ແນວໃດ, ເຄາະຫົວກອກ ລົງໃສ່ຂັ້ນໄດ ແລ້ວລຸກຂຶ້ນ.

-ກູບໍ່ມີເວລາສົນນຳເລື່ອງຕາຍໆແບບນີ້ນຳສຸດອກ. ວ່າແລ້ວກໍ ຍ່າງເຂົ້າໄປໃນຫ້ອງຂອງລາວ.

ເຊມີຍາ ແນມນຳທັງລ໊ອຕາໃສ່ແລ້ວຈິ່ມວ່າ:

-ເວົ້າແທ້ໆເທາະ ອານໂຕນ ເຊມີອໂນວ໊ດ, ເອົາບັກສີງປ່ຽນ ສາ. ແລ້ວທຸກຢ່າງຈະຮຽບຮ້ອຍເອງ... ພວກເຮົາຈະມີຈັກກ່ຽວ.

-ໂຍ້ວ ກະໄປເຂົ້າຄຸກລະບໍ້.

-ແມ່ນໃຜຊິໄປ? ເຈົ້າຫວະ? ບໍ່ມີທາງ! ຈັກກ່ຽວເຂົ້າແພງ ກ່ວາມ້າຕັ້ງທ່ໍໃດ, ອີງການກວດການຳມະກອນຊາວນາກະຊິໄດ້ມັນ ແທນບັກສີງ, ມັນບໍ່ພໍຊິເປັນຫຍັງດອກສຳລັບພວກເຂົານະ, ອັນ ໃດກະຄືກັນ. ແມ່ນບໍ່ລະ? ພວກເຂົາບໍ່ເສຍຫາຍຫຍັງພໍ໊ດ ແລ້ວ ພວກເຮົາກະຊິກ່ຽວເຂົ້າໄດ້ທັນເວລາເວົ້າແນວໃດກະເວົ້າ... ມ້າໂຕ ນີ້ມັນໃຊ້ວຽກຫຍັງບໍ່ໄດ້ແລ້ວນ່າ...

ຊາໂດຣອບຫົວ໊ກຂຶ້ນຢ່າງກັ້ນບໍ່ຢູ່:

-ອ່ຳ... ອະ. ຈັ່ງແມ່ນຄັກ, ເອົາໂລດນ່າ...!

ບູຣູນ ຍົ້ມຊ໊ຶບໍ່ເວົ້າຫຍັງ ມັນຄາບຮອງເຂົ້າໄວ້ແຈປາກຮອງ ຫນ໊ຶ.

ບຣາເຊັນໂກ ທັງຫົວທັງເວົ້າຕາຕື່ວ່າ:

-ຄືຊິຄັກຂະຫນາດເລີຍ ຄັນ ອ.ກ.ກ.ຊ. ເອົາຈັກກ່ຽວເຂົ້າໄປ ທຽມກວຽນ... ແທນບັກສີງ.

ພວກເດັກນ້ອຍແນມມາເບິ່ງຂ້າພະເຈົ້າ ດວງຕາໂຮງຮຸ່ງ:

-ຕິກລີງສາ ອານໂຕນ ເຊມີອໂນວ໊ດ, ຕິກລີງນ່າ... ບໍ່ມີ ຫຍັງເປັນຕາຢ້ານຈັກຫນ້ອຍ... ເຖິງແມ່ນວ່າເພິ່ນຊິຈັບເຈົ້າໄປກະ ບໍ່ພໍ່ອາທິດດອກນາ.

ໃນທ່ີສຸດ ບູຣູນ ກໍປະກາດຢ່າງຈິງຈັງຂຶ້ງວ່າ:

- ບໍ່ມີທາງອື່ນດອກ, ຄັນພວກເຮົາບໍ່ຕົກລົງກໍແມ່ນຈ້າສຸດຂີດໆ ໃຜໆກໍຕ້ອງເວົ້າແນວນີ້ລະ, ແມ່ນແຕ່ ອ.ກ.ກ.ຊ ກໍຄືກັນ!

ຂ້າພະເຈົ້າ ເບິ່ງບູຮູນ ຄຶນແລ້ວເວົ້າງ່ຽງໆວ່າ:

- ກືກຕ້ອງແລ້ວ ໄປເອົາມ້າອອກມາ ອານໂຕນ.

ຫມິດທຸກຄົນແລ່ນໂຫ້ໄປຍັງຄອກມ້າ.

ຊາຍຊະລາໜ້ໃຈໃນໂຕບັກສີ, ກາລີນາ ອີວາໂນວິດ ແກ່ແຂນເສື້ອຂ້າພະເຈົ້າ ແລ້ວເວົ້າຄ່ອຍໆວ່າ:

- ແມ່ນເຈົ້າປ່ວງແລ້ວຫວະ? ເຈົ້າເບື່ອຊີວິດຢູ່ຫນີ້ແລ້ວຊັ້ນເບາະ? ພວກເຂົາຊິໄປຕາຍທາງໃດກໍຢ່າເຫາະແມ້, ນິຄົມ, ເຂົ້າໂອດ. ເຂົ້າອີ່ສັງຫມູ່ນັ້ນ ມັນຊິເປັນຕາຍຈັ່ງໃດກໍຢ່າແມ່ນຕ່ວາ, ເຈົ້າຊິຫນີ້ນໄປເຂົ້າຮັງແຕນຊັ້ນຫວາ?

- ແລ້ວໄປແລ້ວ, ກາລີນາ... ເປັນແນວໃດກໍຢ່າ, ພວກເຮົາຈະໃຊ້ຈັກກ່ຽວເຂົ້າ.

ຊື່ວໂມງຫນ້ຳຕໍ່ມາ ເຈົ້າຂອງຈັກກ່ຽວກໍຈາກໄປພ້ອມດ້ວຍບັກສີ. ອີກສອງຊົ່ວໂມງຕໍ່ມາແຊກແມ້ນໂກກໍມາເຖິງ ແລະແນມເຫັນຈັກກ່ຽວເຂົ້າຢູ່ໃນເດີ່ນ.

- ໂອ່... ສູເດັກນ້ອຍ! ແມ່ນພວກໂຕໄປເອົາຈັກວິເສດຫນ່ວຍນີ້ມາແຕ່ໃສເວ້ຍ?

ພວກເດັກນ້ອຍພາກັນນິ່ງງຽບລົງໃນທັນທີ ຮູ້ສຶກຄືກັບວ່າ ພາຍຸກຳລັງຈະພັດນ້ຳມາ. ຂ້າພະເຈົ້າແນມເບິ່ງ ແຊກແມ້ນໂກ ດ້ວຍຄວາມຮູ້ສຶກເຈັບປວດແລ້ວເວົ້າວ່າ:

- ໄດ້ມາຢ່າງບັງເອີນດອກ!

ອາມໂຕນ ຕົບມືແຮງໆແລ້ວເຕັ້ນຂຶ້ນເທິງລົດ:

- ຜິດຫລືຖືກກໍບໍ່ຮູ້ລະ ສະຫາຍ ແຊກແມັນໂກເອີ້ຍ, ບັດນີ້ ພວກເຮົາມີລົດກ່ຽວເຂົ້າແລ້ວ. ເຈົ້າຢາກທົດລອງເຮັດວຽກແດ່ ຈັກຫນ້ອຍບໍ່ໃຫ້ນີ?

- ຂຶ້ນລົດຄັນນີ້ຫວະ?

- ກໍຊັ້ນແລ້ວ.

- ຄັກລະບໍ. . ມັນຊິເຮັດໃຫ້ຄຶດຮອດຄວາມເກົ່າຄວາມຫລັງ ແດ່... ເອົາລະຊິເບິ່ງວ່າມັນຍັງດີບໍ.

ຈົນຮອດເວລາເລີ່ມພິທີ ແຊກແມັນໂກກັບພວກເດັກນ້ອຍຍັງ ຄົງສົນລະວົນຢູ່ນຳແຕ່ເຄື່ອງຈັກ, ພາກັນເຊັດລ້າງຢອດນ້ຳມັນເຄື່ອງ ມ້ຽນຫັ້ນຈັບຫນີ ກວດບ່ອນນັ້ນບ່ອນນີ້ຢູ່ບໍ່ເລີກບໍ່ແລ້ວ.

ເມື່ອພິທີໄຂບຸນຜ່ານໄປແລ້ວ ແຊກແມັນໂກເອງ ປີນຂຶ້ນລົດ ກ່ຽວເຂົ້າ ແລ້ວຂັບມັນໄປອອກຜ່າທົ່ງນາ ກາຣາບານົບ ອົດກັ້ນສຽງ ຫົວໄວ້ແລ້ວຮ້ອງສຸດສຽງວ່າ:

- ໂອ່... ໂອ່. ນີ້ຈັ່ງແມ່ນຫົວຫນ້າແທ້ໆ!

ຫົວຫນ້າເສດຖະກິດຂອງ ອ.ກ.ກ.ຊ ຍ່າງເລາະຢູ່ກາງທົ່ງສໍ ກາມໄປຫາມິດທຸກຄົນວ່າ:

- ຂ້ອຍຄືບໍ່ເຫັນນ້ຳບັກສີງມັນຢູ່ໃສ? ເປັນຫຍັງ?

ອາມໂຕນ ເອົາແສ້ຊີ້ໄປທາງທົດຕາເວັນຕົກແລ້ວເວົ້າວ່າ:

- ມັນໄປຢູ່ນິຄົມໃຫມ່ພຸ້ນ, ມ້ອນພວກເຮົາຊິລົງມືກ່ຽວເຂົ້າ ຕ້ອງໃຫ້ມັນພັກຜ່ອນກ່ອນ.

ເພິ່ນຈັດໂຕະກິນເຂົ້າໃສ່ກາງປ່າ ພວກເດັກນ້ອຍເຊື້ອເຊີນ

ແຊກແປ້ນໂກເຂົ້າຮ່ວມພາເຂົ້າຄ້ຳມະໂຫລານຄັ້ງນັ້ນ, ເອົາແກ່ງກະລ່ຳ ປີ ແລະປາເຕ່ຊຶ້ນມາສູ່ກິນແລ້ວ ຊວນໂອ້ລົມນຳ.

-ພວກເຈົ້າເຮັດໄດ້ຄັກຫລາຍລະບໍ່ທ່ຳຫາຈັກກ່ຽວຈັ່ງຊີ້ມາໄວ້ໃຊ້ໄດ້, ລາວເວົ້າຂຶ້ນ.

-ຄັກໃດ໋ເນາະແມ່ນບໍ່?

-ຄັກແທ້.

-ສະຫາຍ ແຊກແປ້ນໂກ. ຕາມຄວາມເຫັນຂອງເຈົ້າ ມ້າກັບຈັກກ່ຽວເຂົ້າອັນໃດຄັກກ່ວາກັນຮຶ? -ບຮາເຊັນໂກຖາມຂຶ້ນ.

ແສງຕາລຸກເປັນໄຟຂອງຫນໍ່ແນມລວາດໄປຫນ້ິດແກ່ວ.

-ກໍ... ກໍແລ້ວແຕ່ວ່າ. ແມ່ນມ້າຊະນິດໃດແຫລ້ວ!

-ຊັ້ນກະສົມມຸດວ່າ ແມ່ນມ້າບັກສີ່ງຫັ້ນສາເປັນແນວໃດ?

ຫົວຫນ້າເສດກະກິດຂອງ ອ.ກ.ກ.ຊ ວາງບ່ວງໄມ້ຂອງລາວ ລົງແລະກ່ຽງຫູຟັງເລື່ອງຄືກັບມີແນວຕຸກເຕືອນ. ການາບານົບກັ້ນ ຫົວໄວ້ທັນ ແລະມຸບຫົວລົງບ່ຽງໂຕະ ຜູ້ອື່ນໆກໍເລີຍເຮັດຄືມັນ. ພວກເດັກນ້ອຍຫົວຫລາຍຈົນໂຕຂົດໂຕ່ຍຢູ່ເບື້ອງຫລັງໂຕະ. ຫົວຫນ້າເສດກະກິດລຸກຂຶ້ນຢືນປຸບປັບ ແລ້ວກ້ຽງຕາເບິ່ງໄປອ້ອມປ່າພ້ປານວ່າຢາກຊອກຫາຜູ້ມາຊ່ອຍ. ແຊກແປ້ນໂກເອງບໍ່ເຂົ້າໃຈຫຍັງຫນ້ິດ:

-ແມ່ນພວກເຂົາເປັນຫຍັງກັນ? ແລ້ວໂຕຄຶດວ່າບັກສີ່ງຫັ້ນເປັນມ້າບໍ່ຈິບຊັ້ນຫວາ?

-ພວກເຮົາເອົາມັນແລກກັບຈັກກ່ຽວເຂົ້ານັ້ນ ໃນມື້ນີ້ເອງແຫລະ! -ຂ້າພະເຈົ້າບອກຢ່າງຈິງຈັງ.

ຫົວຫນ້າເສດກະກິດນັ່ງເປ ະລົງເທິງມ້ານັ່ງຂອງລາວ ແຊກແປ້ນໂກ ອ້າປາກຄ້າງ... ຜູ້ອື່ນນິ່ງງຽບ.

-ພວກເຈົ້າເອົາມັນປ່ຽນກັບຈັກກ່ຽວເຂົ້າຄັນນີ້ຫວະ? ລາວຖາມຄ່ອຍໆທັ້ງແນມເບິ່ງສະຫາຍຜູ້ຕິດຕາມ.

ທາງຝ່າຍນີ້ ໂມໂຫຂຶ້ນສຸດຂີດ, ລຸກຂຶ້ນຈາກຕັ່ງ:

-ພວກເດັກນ້ອຍຫົວແຂງ... ພວກນີ້ບ່າ, ລາວດ່າແຮງໆ: ພວກຂີ້ສູດ, ພວກຫົວດື້...

ໃນທັນທີທັນໃດນັ້ນ ແຊກແມັນໂກ ກໍຫົວຂຶ້ນຢ່າງແຈ່ມໃສເບີກບານ:

-ອ່າ ພວກຂີ້ລັກ! ແມ່ນເລື່ອງນີ້ເອງ! ແຕ່ວ່າພວກເຮົາຊິເອົາຈັກກ່ຽວໄປເຮັດຫຍັງລະ?

-ຍັງມີສັນຍາເດີ: ຈ່າຍຄ່າເສຍຫາຍ ๕ ເທົ່າ! ຜູ້ຮອງຂອງລາວເວົ້າຕັດຄວາມຂຶ້ນຢ່າງຮ້າຍໆ.

-ເຊົາເທາະເລື່ອງນັ້ນນະ! ແຊກແມັນໂກ ເວົ້າສຽງກ້ຶມໆໃສ່, -ເຈົ້າເອງຫັ້ນບໍ່ສາມາດເຮັດແນວນີ້ດອກ.

-ຂ້ອຍຫວະ?

-ເອ້ ເຈົ້າຫັ້ນລະ, ເຈົ້າບໍ່ມີຄວາມສາມາດດອກ, ຊັ້ນຈົ່ງອັດປາກໄວ້ດີກ່ວາ. ເພາະວ່າພວກເຂົາສາມາດເຮັດໄດ້ ພວກເຂົາຢາກກ່ຽວເຂົ້າໃຫ້ແລ້ວເດ້ ທັ້ງຮູ້ດີວ່າ ເມັດເຂົ້າມີລາຄາສູງກ່ວາ ອັນເຈົ້າຊິບັບໄຫມແບບຂູດຮີດຮອດ ๕ ເທົ່າຫັ້ນຊ້ຳ ເຂົ້າໃຈບໍ່? ແລະການທີ່ພວກເຂົາບໍ່ຢ້ານໃຜ, ບໍ່ວ່າເຈົ້າຫລືວ່າຂ້ອຍນັ້ນກໍແມ່ນເລື່ອງດີເລື່ອງຫນ້ຳຄືກັນ. ເວົ້າງ່າຍໆວ່າມື້ນີ້ພວກເຮົາມອບຈັກກ່ຽວເຂົ້າຄັນນີ້ໃຫ້ເປັນຂອງຂ້ວນແກ່ພວກເຂົາເລີຍ.

ໂຕະອາຫານ ແລະຈິດໃຈຂອງຫົວຫນ້າເສດຖະກິດສິນລະວິນ

ຂຶ້ນພ້ອມໆກັນ, ພວກເດັກນ້ອຍຫຸ້ມອຸ້ມໂຍນ ແຊກແມັນໂກຂຶ້ນກາງ ອາກາດຫລາຍເທື່ອ ດ້ວຍຄວາມຮູ້ສຶກຂອງຜູ້ມີໄຊ ຈົນໃນທີ່ສຸດເມື່ອ ເຂົາເປັນອິດສະຫລະຢືນສັ່ນຫົວໄປມາທັງຫົວຢູ່ນັ້ນ ອານໂຕນຈຶ່ງ ຫຍັບເຂົ້າໄປໃກ້ໆແລະບອກລາວວ່າ:

- ຊັ້ນສຳລັບອີ່ແມຣິກັບບັກມິນລັ່ງເດ້, ຊິຕົກລົງກັນແບບໃດ?

- ແມ່ນຫຍັງເກາະ? ຊິຕົກລົງແບບໃດຊັ້ນຫວະ?

- ຊິໃຫ້ພວກເຮົາເອົາມັນສີ່ລາວຫວະ? ອານໂຕນ ກາມທັງ ງຶກຫົວໄປທາງຫົວຫນ້າເສດກະດົດ.

- ໂຍ້ວກະຊັ້ນລະບໍ້.

- ບໍ່, ຂ້ອຍບໍ່ສີ່ງດອກ, ອານໂຕນເວົ້າຂຶ້ນ.

- ໂຕຕ້ອງສີ່ງເຂົາ; ໄດ້ລົດກ່ຽວກະພໍແລ້ວເດ້! ແຊກແມັນໂກ ໂມໂຫຂຶ້ນແດ່.

ແຕ່ອານໂຕນກໍໂມໂຫຄືກັນ:

- ກະເອົາຄືນສາເຫາະແມ້ ລົດກ່ຽວເຈົ້ານະ! ເຊີນໂລດຊິເອົາ ໄປເຮັດຫຍັງກະດາຍ! ພວກເຮົາຊິເອົາ ກາຣາບານີບມາທຽມກະ ໄດ້ດອກ ແລ້ວຊິເປັນແນວໃດລະ?

ແລ້ວມັນກໍຍ່າງໄປຫາຄອກມ້າ.

- ບັກເຜດເຮ້ຍ! - ແຊກແມັນໂກເວົ້າທ່າທາງເປັນກັງວົນ.

ຜູ້ອື່ນໆທີ່ຫຸ້ມລ້ອມຢູ່ມິດງຽບໄປ, ແຊກແມັນໂກຫັນມາຫາຜູ້ ຮອງ:

- ເອົາລະ... ພວກເຮົາມາພໍ້ເລື່ອງຄັກແລ້ວເດ້ບາດນີ້ - ຂາຍມ້າ ໃຫ້ພວກເຂົາເລີຍຊະ, ບໍ່ຕ້ອງກ່ຽວເລື່ອງເງື່ອນໄຂດອກ... ພວກ

ເຂົ້າກອນປະສາດໂພດ ... ແຕ່ກໍແມ່ນເດັກດີຢູ່ເກົ່ງຈະຄືໂຈນແດ່ກໍ ດາຍ. ໄປ ... ໄປຊອກຫາບັກຂີ້ໂມໂຫຍ່ພຸ້ນກັນເທາະ.

ອານໂຕນ ນອນຢູ່ເທິງກອງເຟືອງໃນຄອກມ້າ.

- ເອົາລະ ອານໂຕນ ພວກເຮົາຕົກລົງຂາຍມ້າໃຫ້ໂຕແລ້ວ.

ອານໂຕນໂງຫົວຂຶ້ນ.

- ບໍ່ແພງຕິ?

- ພວກເຈົ້າສາມາດຂາຍໄດ້ທໍ່ໃດກະທໍ່ນັ້ນ.

- ອ່າ ... ແນວນີ້ຈັ່ງແມ່ນຄັກ! - ອານໂຕນ ເວົ້າຂຶ້ນ. - ເຈົ້ານີ້ ສະຫລາດແທ້ໆ.

- ຂ້ອຍກະຄຶດວ່າຈັ່ງຊັ້ນລະ! ແຊກແນັນໂກຍີ້ມນຳ.

- ສະຫລາດກວ່າຫົວຫນ້າເສດກະກິດຂອງເຈົ້າອີກ.

ບົດທີ ๔๑

ພວກເກົ້າອຸບາດ

ເວລາແລງຄ້ອຍຄ່ຳໃນຍາມຮ້ອນຢູ່ໃນນິຄົມຂອງພວກເຮົາ ບັນຍາກາດເປັນຕາອອນຊອນຫລາຍ ທ້ອງຟ້າປອດໂປ່ງແຈ່ມໃສແຜ່ຂອບເຂດກວ້າງໄປຕາມແນວປ່າອັດສະດົງວັ່ງເວ້ງ ຢູ່ສຸດແຖວຕົ້ນໄມ້ກົນຫນາກ ເງົາຕົ້ນດອກຕາເວັນຫນູບຍຸບລົງຍ້ອນແສງແດດແຜດເຜົາເມື່ອຕອນກາງເວັນ, ເນີນຝັ່ງສູງຊັນຊຸ່ມເຢັນຄົດໂຄ້ງລັບຕາໄປຕາມຄວາມມືດພໍ່ພຸ່ມພູ່ຂອງເວລາຄ້ອຍຄ່ຳ ສຽງໂອ້ລົມຂອງພວກເດັກນ້ອຍຕາມຫົວຂັ້ນໃດ ດັງອ່ອນມາກະທົບຫູຈາກແຈໃດແຈຫນຶ່ງ ບໍ່ມີ

ໃຜສາມາດບອກໄດ້ວ່າພວກເຂົາມີນ້ຳກັນຈັກຄົນ ແລະມີໃຜແດ່ຮ່ວມ
ຢູ່ນຳ.

ໃນຂະນະທີ່ແສງສະຫວ່າງຍ້ອງອາບທາແຜ່ນດິນຢູ່ນີ້ ມີເວລາຫນຶ່ງ
ຊົ່ງບໍ່ສາມາດໃຈ້ແຍກວັດຖຸຕ່າງໆໄດ້ວ່າອັນໃດເປັນອັນໃດຫລືໃຜເປັນ
ໃຜນັ້ນຫວະ ໃນຊ່ວງເວລານີ້ປາກົດວ່າງເປົ່າລົງ, ຈົນຫລາຍໆຄົນ
ກາມຕົນເອງວ່າ: ພວກເດັກນ້ອຍພາກັນຫນີກຫົວຢູ່ທາງໃດ? ແຕ່
ກ້າໄປເບິ່ງອ້ອມໆເຄຫາສະການ ຈົ່ງຈະເຫັນພວກເຂົາຫນີດທຸກຄົນ,
ຫັ້ນເດ້ຢູ່ຄອກມ້າຟຸ້ນນີ ໕ ຄົນ ກຳລັງຊຸ້ມຊັບປຶກສາຫາລືກັນຢູ່ໃກ້ໆ
ກັບສາຍຄໍ້ມ້າທີ່ຫ້ອຍຕ່ອງແຕ່ງຢູ່ຝາ, ໂຮງເຮັດເຂົ້າຈີ່ນັ້ນ ກໍ່ວ່າເປັນ
ບ່ອນເຕົ້າໂຮມຈັດກອງປະຊຸມແທ້ໆແຫ່ງຫນຶ່ງ ໃນອີກຊົ່ວໂມງຫນຶ່ງ
ຂ້າງຫນ້ານີ້ເຂົ້າຈີ່ກໍ່ຈະສຸກແລ້ວ ຜູ້ທີ່ມີອົງກ່ຽວຂ້ອງກັບການຈັດ
ພາເຂົ້າແລ້ວ ແລະນາຍຍາມປະຈຳວັນໄດ້ມານັ່ງປະຈຳທີ່ຢູ່ເທິງແປ້ນ
ມ້າໃນຫ້ອງທີ່ກວາດມ້ຽນຢ່າງສະອາດນັ້ນ ແລ້ວພວກເຂົາໂອ້ລົມກັນ
ຢູ່ຄ່ອຍໆ. ຢູ່ອ້ອມນ້ຳສ້າງຟຸ້ນ ມີເດັກນ້ອຍຈາກຫລາຍພາກສ່ວນໄປ
ເຕົ້າໂຮມກັນຢູ່ໂດຍບໍ່ເຈດຕະນາ ບາງຄົນມາຕັກນ້ຳ ກໍ່ຄຸມາພ້ອມ
ອີກຜູ້ຫນຶ່ງຍ່າງກາຍມາກັບອີກຄົນຫນຶ່ງຢຸດລົມກັນ ເພາະບັງເອີນວ່າ
ມີຄົນຊອກຫາຫນ້ານີ້ມາຕັ້ງແຕ່ເຊົ້າຟຸ້ນແລ້ວ: ແຕ່ລະຄົນລົມເລື່ອງນ້ຳ
ໄປເພາະພະຍາຍາມຄິດຫາແຕ່ອັນອື່ນ ເບິ່ງບາງເທື່ອກໍ່ບໍ່ສຳຄັນຊ້ຳ
ດອກ... ແຕ່ໃນຍາມຄ້ອຍຄ່ຳທີ່ຫນ້າອອນຊອນກາງລະດູຮ້ອນແນວນີ້
ມີຫຍັງແດ່ທີ່ບໍ່ສຳຄັນ?

ຢູ່ລົ້ນເດີ່ນຟຸ້ນ ກະໂຕບ່ອນຕາຝັ່ງເລີ່ມຄ້ອຍເນີນລົງໄປຫາຫນອງ
ຂອນໄມ້ເປືອກຫລ້ອນແລ້ວຂອນຫນຶ່ງວາງຂວາງຢູ່ ພວກເດັກນ້ອຍ

ກຸ່ມໃຫຍ່ທີ່ນີ ມີເຕຍກິນເປັນຫົວຫນ້ານັ່ງຮຽງຢາຍກັນຟັງຫມໍເລົ່ານິ ທານນ່ອນໆເລື່ອງຫນຶ່ງຂອງຫມໍວ່າ :

-ແລ້ວໃນຕອນເຊົ້າຜູ້ຄົນກໍພາກັນມາວັດແລ້ວສອດແສງຕາ ໄປ ທົ່ວ. ບໍ່ມີພະຈັກອີ່ ມັນຫມາຍຄວາມວ່າແນວໃດ? ພວກເພິ່ນໄປ ໃສຫມົດແລ້ວ? ຄົນຍາມບອກພວກເຂົາວ່າ : "ບາງທີອາດຊິແມ່ນ ຜີເຜດມາລາກພະພວກເຮົາໄປລ້ຽງຫນອ ນີ້ຫມົດ. ພວກເຮົາມີພະ ຢູ່ສີ່ອົງ - "ສີ່ອົງ", "ກໍຄືຄວາມຂ້ອຍວ່ານັ້ນລະ, ຜີເຜດໄດ້ມາລາກ ແກ່ ເອົາພວກເພິ່ນໄປລ້ຽງບອກຕົນ ແລ້ວ ແຕ່ຕອນກາງຄືນພຸ້ນ, ທ້ັງສີ່ອົງເລີຍ".

ພວກເດັກນ້ອຍຕັ້ນໃຈຟັງນິດຫ້ງດ້ວຍຄວາມຈົດຈໍ່, ແສງຕາລຸກ ຈາບໆ ຍັງຄົງມີແຕ່ ໂຕສະກາຜູ້ດຽວເທົ່ານັ້ນທີ່ໃນບາງໂອກາດສົ່ງ ສຽງອຸທານອອກມາຄ່ອຍໆ ດ້ວຍຄວາມພໍໃຈ. ບໍ່ແມ່ນຍ້ອນເລື່ອງຜີ ເຜດນັ້ນດອກ ທີ່ເຮັດໃຫ້ມັນຂຶ້ນອົກຂຶ້ນໃຈນໍາ ແຕ່ແມ່ນຍ້ອນວ່າຄົນ ແຕ່ລາວຈໍ້າບໍ່ຮູ້ວ່າຜີເຜດລາກຖ້ົງເອົາພະຢູ່ວັດໂຕເອງ ຫລືພະວັດອື່ນ ໄປລ້ຽງຫນອງ. ຮູບພາບຂອງພະແຕ່ລະອົງແມ່ນອັນດຽວກັນຄືເປັນ ພະຮູບອ້ອນໆບໍ່ມີຊື່ສຽງຮຽງນາມໃດໆ - ຄຶດເບິ່ງວ່າ ມັນບໍ່ແມ່ນວຽກ ນ້ອຍໆປານໃດດອກທີ່ຕ້ອງແບກເອົາແຕ່ລະອົງໄປ ໂຍນລ້ຽງຫນອງ ເທື່ອລະຄົນແນວນີ້. ມັນແມ່ນຄວາມຮູ້ສຶກເມີນເສີຍຢ່າງເລິກເຊິ່ງຕໍ່ ຊາຕາຂອງພວກຂະເຈົ້າ ເຊັ່ນດຽວກັບຄວາມຮູ້ສຶກຕອນຈະລ້ຽງນົກປາບ ເທົ່ານັ້ນເອງ.

ໃນສວນເກົ່າພຸ້ນສຽງຫົວສະອົກສະອ້ອຍຂອງ ໂອເລຍ ໂວໂຣ ໂນວາ ດັງລອດພຸ່ມໄມ້ອອກມາຈາກນັ້ນຈົ່ງມີສຽງຫ້າວແຫບຕ່ໍາໃນ

ກ້ອຍທຳນອງຢອກໄຍເລິກໆຂອງ ບູຮູນໂຕ້ຕອບຄືນ ສຽງຫົວທີ່ດັງຕໍ່ ຂຶ້ນອີກເທື່ອໃຫມ່ບາດນີ້ບໍ່ແມ່ນສຽງຫົວຂອງໂອເລຍອີກແລ້ວ ແຕ່ ແມ່ນສຽງຂອງກຸ່ມສາວນ້ອຍທັງຫມົດ ທີ່ຫົວຂຶ້ນໂຄບໆພ້ອມກັນ ບູຮູນ ເອົາມືງຸ້ມຫມວກເກັບ ໂປໂລອອກມາແລ່ນຫລົບໄປທາງໂຄກ ປ່າຫ່າງ ຕິດຕາມດ້ວຍສຽງຫົວແຈ່ມໃສຂອງພວກແມ່ຍິງ. ເຊລາປູ ຕິນຢຸດລັ່ງເລຢູ່ກາງທົ່ງ ທັງຮູ້ສຶກສົນໃຈ ທັງບໍ່ແນ່ໃຈວ່າຕົນຄວນຈະ ເຮັດຫຍັງດີ ຫົວເບາະ ຫລືວ່າແລ່ນຫນີໄປເລີຍ? ເພາະວ່າເຂົາ ເອງກໍມີເລື່ອງເກົ່າໆທີ່ຈະຕ້ອງຄິດບັນຊີກັບພວກແມ່ຍິງຄືກັນ.

ແຕ່ວັນເວລາຄ້ອຍຄ່ຳອັນສະຫງົບງຽບແຝງສະເຫນ ແລະເຫມາະ ທີ່ຈະນັ່ງຄຶດຝັນຢ່າງເພີດເພີນອາລົມແນວນີ້ ກໍບໍ່ມັກສອດຄ່ອງກັບສະ ພາບອາລົມຈິດຂອງພວກເຮົາສະເຫມີດອກ, ຕູ້ໃສ່ອາຫານຂອງນິ ຄົມ, ຫ້ອງໃຕ້ດິນຂອງໂຮງບ້ານໃກ້ເຮືອນຄຽງ ກະທ່ຽມຮອດຫ້ອງພັກ ຂອງພວກຄູສອນຍັງຄົງເປັນເວທີໃຫ້ແກ່ການສະແດງພາກພິເສດຢູ່ຕໍ່ ໄປ ເຖິງວ່າຈະບໍ່ຢູ່ໃນລະດັບດຽວກັບປີທຳອິດທີ່ນິຄົມມາຕັ້ງຂຶ້ນກໍ ຕາມ. ໂດຍທົ່ວໄປແລ້ວ ການທີ່ສິ່ງຂອງອັນໃດອັນຫນຶ່ງຫາຍໂຕໄປ ນັ້ນ ນັບວ່າເປັນເຫດການທີ່ດີໆ ຈຶ່ງມີເທື່ອຫນຶ່ງ. ຈັ່ງຊັ້ນເມື່ອຜູ້ ຊ່ຽວຊານໃນດ້ານນີ້ປາກົດຕົວເຂົ້າມາໃນນິຄົມ, ບໍ່ພໍດົນເຂົາກໍຈະຮູ້ ສຶກຕົວວ່າ ຜູ້ທີ່ເຂົາຈະສູ້ຍັນນັ້ນບໍ່ແມ່ນຜູ້ອຳນວຍການແຕ່ຢ່າງໃດ ແຕ່ຫາກແມ່ນຄົນກຸ່ມໃຫຍ່ກຸ່ມຫນຶ່ງຂອງນິຄົມ ແລະກຸ່ມດັ່ງກ່າວນີ້ ກໍ ເຄີຍພິສູດຄວາມຫ້ຽມຫານຮຸນແຮງທີ່ສຸດອອກມາແລ້ວ. ຫວ່າງຕົ້ນ ລະດູຮ້ອນ ພວກເຮົາເກືອບດຶງເອົາສະມາຊິກໃຫມ່ຄົນຫນຶ່ງອອກ ຈາກເງື້ອມມືຂອງພວກເດັກນ້ອຍບໍ່ໄຫວ, ພວກເຂົາຈັບມັນໄດ້ຕອນ

ທີ່ມັນພວມປີນເຂົ້າປ່ອງຢ້ຽມຫ້ອງພັກຂອງ ເອີກາເຕີຣີນາ ກຣິກໍ ເຣັບນາ ພໍດີ ພວກເຂົາຕີມັນດ້ວຍຄວາມໂກດແຄ້ນແບບບອດໃບ້ ຊະນິດທີ່ວ່າບໍ່ມີບຸກຄົນໃດບຸກຄົນຫນຶ່ງຈະເຮັດໄດ້ ນອກຈາກກຸ່ມຄົນເປັນ ຫມູ່ແບບນີ້ ເມື່ອຂ້າພະເຈົ້າຫນີເຂົ້າໄປຢູ່ທ່າມກາງພວກເຂົານັ້ນ ພວກເຂົາກໍຊຸກຍັນຂ້າພະເຈົ້າອອກດ້ວຍຄວາມໂກດແຄ້ນຮ້າຍຮຶນ ປະເພດດຽວກັນ ບາງຄົນ ຮ້ອງອອກມາຢ່າງຂຶ້ນອົກຂຶ້ນໃຈວ່າ :

-ຮູ! ດັນ ອານໂຕນ ອອກໄປແມ້!

ກາງລະດູຮ້ອນປີນີ້ ຄະນະກຳມະການໃນເມືອງສົ່ງກູຊະມາເລຊີ ມາໃຫ້ພວກເຮົາ, ຫມໍນີ້ມີທ່າທີຄ້າຍລູກຊອດຊຶການຫລາຍດວງຕາ ທ້າງຄູ່ຂອງຫມໍດຳເປັນມັນແຈ່ມໃສປະດັບໃບຫນ້າ ຜິວກ່ຳແດດສີນ້ຳ ອ້ອຍແທ້ມຢ່າງພໍເຫມາະພໍດີ ວາດແວວໃນແກ່ນຕາອ່ອງໄວວັບແວບ ພໍປານສ້າງມາໄວ້ເພື່ອສອດສ່ອງວັດຖຸສິ່ງຂອງທຸກຢ່າງເຊິ່ງກົກປະວາງ ໄວ້ເພື່ອໃຫ້ຄົນລັກ. ທຸກພາກສ່ວນໃນຮ່າງກາຍຂອງເລຊີປາກົດວ່າ ຢູ່ໃນທ່າກຽມພ້ອມສະເຫມີ ທີ່ຈະເຄື່ອນໄຫວຕາມການບັນຊາຂອງ ຕາຄູ່ນີ້ຂອງມັນ. ຕີນທັງສອງຫຍັບຍ້າຍເຂົ້າຫາສິ່ງຂອງປາສະຈາກ ຄົນເຝົ້າຍາມຢ່າງບໍ່ຮູ້ສຶກຕົວ ຈາກນັ້ນມືຂອງມັນກໍເດ່ຍື່ດອອກໄປແຕະ ຕ້ອງສິ່ງຂອງຕ່ອນນັ້ນຢ່າງບອກໄດ້ໃຊ້ຟັງ, ກະດູກສັນຫລັງຂອງມັນ ອ່ອນນົ້ມກົ້ມກ່ອງອ່ອງໄວຫລົບເຂົ້າຫາບ່ອນຊົ້ນ ທຳມະຊາດໄດ້ ຢ່າງງ່າຍດາຍ ຫູຂອງມັນສາມາດລະດັບຮັບຟັງສຽງຮຸກສີ່ຕ່າງໆຕະ ຫລອດທັງສຽງອັນບໍ່ງບອກເຖິງສັນຍານໄພອັນຕະລາຍໄດ້ຢ່າງແຈ້ງ. ເປັນການຍາກສົມຄວນທີ່ຈະເວົ້າວ່າ ເລຊີ ໃຊ້ສະຫມອງຂອງມັນ ເຂົ້າໃນວຽກງານເຫລົ່ານີ້ຫລາຍພໍພຽງໃດ. ເລື່ອງຕ່າງໆທີ່ເກີດຂຶ້ນ

ກັບນິຄົມໃນຂັ້ນຕໍ່ມາ ຈຶ່ງເຮັດໃຫ້ຕີລາຄາຄ່າຫົວຂອງມັນໄດ້ ແຕ່ໃນ ຂັ້ນທຳອິດນີ້ ພວກເດັກນ້ອຍສ່ວນຫລາຍ ພາກັນຕີລາຄາວ່າ ຫົວ ຂອງມັນແມ່ນອະໄວຍະວະຕ່ອນ ອະປະໂຫຍດທີ່ສຸດໃນໂຕຂອງມັນ.

ຈັ່ງແມ່ນ ຫມໍ ເລຊີຄົນນີ້ເຮັດໃຫ້ພວກເຮົາເປັນຕາອຸກໃຈ ນຳ! ບໍ່ມີຈັກໝົດອກທີ່ມັນບໍ່ກໍ່ເລື່ອງແລະຖືກຈັບໄດ້ຄາຫນ້າຄາເຂົ້າ ນະ. ບາງເທື່ອກໍແມ່ນນ້ຳມັນເຄັມດ້ານຕ່ອນຫລອຍຈາກກອງນທີ່ ຫາກໍກັບມາແຕ່ໃນເມືອງ ຫລືວ່ານ້ຳຕານຊາຍຈັກກຳຫາຍໄປຈາກຕູ້ ໃສ່ຂອງກິນຕໍ່ຫນ້າຕໍ່ຕາທັ້ນໂລດ, ບາງຄັ້ງມັນຫລອຍເອົາຢາເສັ້ນ ຈາກກົ່ງສົ້ງຫມູ່ ຫລືລັກກິນເຂົ້າຈີ່ຈັກເດ່ືງກ້ອນເວລາຍ່າງມາ ແຕ່ໂຮງເຂົ້າຈີ່ໄປຫາເຮືອນຄົວ, ເວລາໄປເວົ້າວຽກເວົ້າງານກັບ ຄູສອນຜູ້ໃດຜູ້ຫນຶ່ງໃນຫ້ອງພັກ ມືດນ້ອຍໆວາງຢູ່ໂຕະກໍຈະຫາຍໂຕ ໄປ. ເລຊີ ບໍ່ເຄີຍວາງແຜນລ່ວງຫນ້າກ່ອນຈະລົງມືປະຕິບັດສິ່ງໃດ ສິ່ງຫນຶ່ງຈັກເທື່ອ ບໍ່ວ່າຈະເປັນແຜນງ່າຍໆ ແລະໃຊ້ເຄື່ອງໄມ້ເຄື່ອງມື ອັນໃດເຂົ້າລ່ວຍ. ມັນກໍ່ວ່າມືຂອງມັນເປັນເຄື່ອງມືທີ່ເຫມາະສົມທີ່ ສຸດແລ້ວ ພວກເດັກນ້ອຍເຄີຍຫຸ້ມຕີມັນແລ້ວ ແຕ່ມັນຊ້ຳຫົວໃສ່ ຫນ້າພວກເຂົາຊ້ຳ.

-ພວກໂຕຕີເຮົາໄດ້ບໍ່ມີປະໂຫຍດຫຍັງດອກ, ເຮົາເອງກໍ່ບໍ່ຮູ້ ຊ້ຳບ່າວ່າ ມັນເກີດຂຶ້ນຈັ່ງໃດ. ເຮົາຢາກໃຫ້ພວກໂຕມາເປັນເຮົາ ລອງເບິ່ງເດ້!

ກູຊະມາເປັນບ່າວນ້ອຍແຈ່ມໃສມັກມ່ວນຄົນຫນຶ່ງ, ດ້ວຍອາຍຸ ພຽງ ໑໕ ປີ ເທົ່ານັ້ນ ຫມໍເຄີຍຜ່ານປະສົບການຫລາຍອັນຫລາຍ ແນວມາແລ້ວ ໄດ້ທ່ອງທ່ຽວໄປຫລາຍບ່ອນຮູ້ເຫັນຫລາຍສິ່ງຫລາຍ

ຢ່າງ ເຄີຍຜ່ານຄຸກເກືອບທຸກໆແຫ່ງໃນເຂດແຂວງນີ້. ມີ ການສຶກສາ ສະຫລາດ ວ່ອງໄວເຄື່ອນໄຫວຢ່າງບໍ່ຫວັ່ນກົວສິ່ງໃດ, ສາມາດເຕັ້ນລຳຈ້ຽງຫວະໂກປາກໄດ້ຢ່າງສວຍງາມ ແລະບໍ່ສະດຸ້ງຕໍ່ສິ່ງ ໃດໆຢ່າງງ່າຍດາຍ.

ຍ້ອນຄຸນສົມບັດຕ່າງໆເຫລົ່ານີ້ແລ້ວ, ພວກເດັກນ້ອຍຈຶ່ງອະນຸ ໂລມຍົກໂທດໃຫ້ມັນຫລາຍຄັ້ງຫລາຍຄາວ ແຕ່ຄວາມຫລົງໄຫລໄຝ່ ໃຈ ແຕ່ເລື່ອງລັກຂະໂມຍຂອງມັນ ເລີ່ມເຮັດໃຫ້ພວກເຮົາຫົນ ຫວຍ. ໃນທີ່ສຸດ ມັນກໍໄປເສຍທ່າ ເຂົ້າຫຍຸ້ງກ່ຽວໃນເລື່ອງຕ່າງໆ ເລື່ອງຫນຶ່ງ ເຊິ່ງເຮັດໃຫ້ມັນຕ້ອງນອນຕິດຕຽງຢູ່ເຫົ້ງເຕີບ. ເລື່ອງ ມີຢູ່ວ່າຄືນຫນຶ່ງ ມັນໄປລັກເຂົ້າຈີ່ ເລີຍກຶກ ເຂົາເອົາຟືນຟາດຫົວ ຫມົດແຮງ. ດີນມາແລ້ວທີ່ ໂກສເຈຍ ເວດກອບສະກີ ຊ່ວງເຂົ້າຈີ່ ຂອງພວກເຮົາບໍ່ເຂົ້າໃຈວ່າເປັນຫຍັງເວລາເອົາເຂົ້າຈີ່ໄປຍາຍນັ້ນ ມັນ ຈຶ່ງບໍ່ພຽງພໍຈັກເທື່ອ ແລະນ້ຳຫນັກແປ້ງປະສົມແລ້ວກໍຫນ້ອຍລົງ ເລື້ອຍໆ ຈົນເຮັດໃຫ້ຫມໍ້ຕ້ອງໄດ້ຮັບຄຳຕຳຫນິຕິຕຽນແບບບໍ່ມ່ວນຫູ ຈາກ ກາລິນາ ອີວາໂນວິດຍ້ອນ. ໂກສເຈຍ ຫ້ວງແຮ້ວດັກທ່ວງຊະ ນິດມີປະສິດທິຜົນແບບບໍ່ມີໃຜຄາດຄຶດເລີຍ ແລະແລ້ວຄືນຫນຶ່ງ ເລຊີ ກໍຍ່າງໄປຍຽບແຮ້ວຢ່າງງ່າຍດາຍ. ເຊົ້າມື້ຕໍ່ມາ ມັນໄປຂໍໃຫ້ ເອົກາ ເຕີຣິນາ ກຣິກໍເຣັບນາ ພັນບາດແຜໃຫ້ໂດຍເລົ່າວ່າຕົນເອງປີນຕົ້ນ ມອນປ່າ* ເພື່ອເກັບຫມາກມັນມາກິນເກີດພະລາດຕົກຈຶ່ງມີບາດແຜ ແບບນີ້. ເອົກາເຕີຣິນາ ກຣິກໍເຣັບນາ ຕົກໃຈຫລາຍທີ່ເຫັນວ່າບາດ

ມອນປ່າ* ພືດພຸ່ມສູງຄ້າຍຕົ້ນມອນ, ມີຫມາກເນື້ອອ່ອນກິນໄດ້

ແຜໃຫຍ່ຮ້າຍແຮງປານນີ້ ເກີດຂຶ້ນຈາກການຕົກຕົ້ນໄມ້ ແຕ່ຢ່າງໃດກໍ ຕາມໃນເມື່ອເລື່ອງມັນບໍ່ກ່ຽວກັບນາງ ຈົ່ງລ້າງພັນບາດແຜໃສ່ຢາໃຫ້ ແລ້ວພາມັນໄປສົ່ງຫໍພັກ ເພາະຖ້າບໍ່ເຊັ່ນນັ້ນ ມັນໄປເອງບໍ່ໄຫວ. ສ່ວນໂກສເຈຍກໍບິດອໍາເລື່ອງເກີດຂຶ້ນຢູ່ໃນໂຮງເຂົ້າຈີ່ໄວ້ ບໍ່ເວົ້າເກົ່າ ລາຍລະອຽດຍິບຍ່ອຍໃດໆ ໃນເວລາຫວ່າງຫມໍໄປເຮັດຫນ້າທີ່ດູແລ ຄົນເຈັບນັ່ງເຝົ້າຕົນຕຽງຂອງກູຊະມາ ນັ່ງອ່ານນະວະນິຍາຍ "ຜະຈົນ ໄພຂອງທອມຊໍເຍ້" ເສີຍຢູ່.

ເມື່ອເລຊີມີອາການດີຂຶ້ນແດ່ແລ້ວ ຫມໍກໍເລົ່າເລື່ອງທີ່ເກີດຂຶ້ນ ໃຫ້ຫມູ່ຟັງເອງ ທັງຫົວເຍາະເຍີ້ຍເຄາະກໍາຂອງຕົນເອງ, ກາຣາບາ ນິບ ບອກຫມໍວ່າ:

-ນີ້ບ່າ ກູຊະມາ, ຄັນແມ່ນເຮົາເປັນໂຕເກາະ ກົກເຄາະຮ້າຍ ປານນີ້ແລ້ວ ເຮົາຄືຊິເຊົາລັກແຕ່ຄົນແລ້ວລະ ບໍ່ຊັ້ນມື້ໃດມື້ຫນຶ່ງໂຕຊິ ກົກເຂົາຕີແຈບຕາຍກົ້ມລ້າງດອກ!

-ເຮົາເອງປະຫລາດໃຈຄືກັນ, ກູຊະມາຈົ່ມພຸມໆ, ເປັນຫຍັງ ເຮົາຈົ່ງໂຊກຮ້າຍແນວນີ້ ຄືຊິແມ່ນຍ້ອນວ່າ ເຮົານີ້ບໍ່ແມ່ນຂີ້ກະໂຫຍ ແທ້ໆຫັ້ນລະເນາະ, ເຮົາຊິລອງເບິ່ງອີກຈັກສອງເທື່ອກ່ອນ ຖ້າບໍ່ ສໍາເລັດເຮົາຈົ່ງຊິເຊົາເລີຍ ແມ່ນບໍ່ເນາະ ອານໂຕ ເຊມືອໂນວ໌ດ?

-ສອງເທື່ອຟຸ້ນຫວະ? -ຂ້າພະເຈົ້າຕອບມັນ, -ຄັນວ່າແນວ ນີ້ ກະບໍ່ຄວນລັກຊ້າແຫລ້ວທົດລອງໂລດນ່າ ເອົາຫັ້ນເລີຍ, ຈັ່ງໃດ ໂຕກະຄືເຮັດບໍ່ຫລ້ວນດອກ. ໂຕບໍ່ມີຄວາມສາມາດຫຍັງເລີຍໃນ ເລື່ອງນີ້.

-ເຈົ້າຄິດວ່າຈັ່ງຊັ້ນຫວະ?

- ເອ້ີ... ແຕ່ເຊມີຍາ ເປໂຕຣວິດ ວ່າໂຕຊີເປັນຊ່າງຕີເຫລັກທີ່ດີໃດ໋ລະ...

- ມັນວ່າແນວນັ້ນຫວະ?

- ເອີວ່າຈັ່ງຊີ້ລະ, ແຕ່ມັນເວົ້າອີກຕໍ່ມວ່າໂຕຫັ້ນຫລອຍເອົາເຄື່ອງເຮັດໃຫມ່ໆຂອງຫມໍສອງອັນຢູ່ໂກຕີເຫລັກມາເວລານີ້ ຄືຊີຍັງຢູ່ໃນກົງສ້ົງນີ້ລະ.

ເລຊີ ອາຍຈົນຫນ້າແດງຮົ້ນຂ໊ຶ້ນເກົ່ງຂ໊ຶ້ນຜິວຫນັງສີດຳຂອງມັນບໍ່ສາມາດປົກປິດໄວ້ໄດ້. ການາບາບິບ ຈ່ອງກົ່ງມັນໄວ້ ແລະຮ້ອງຄາງແບບບໍ່ຄືໃຜອອກມາວ່າ:

- ກະແທ້ລະບໍ, ຢູ່ຫນີ້ແລ້ວ! ເຫັນບໍ່ ເຮັດເປັນຄ້ັ່ງທຳອິດ ມົ່ງ ກະຖືກຈັບໄດ້ແລ້ວ!

- ເວນຕາຍເອ້ີ! - ເລຊີຈົ່ມພຸມໆທັ່ງປົ້ນກົ່ງເອົາເຄື່ອງອອກຫມົດ.

ເກືອບເວົ້າໄດ້ວ່າ ເລື່ອງໃນທຳນອງນ້ີ ມີກໍລະນີດ໋ງວ ເທ່ານັ້ນທ່ີເກີດ ຂ໊ຶ້ນພາຍໃນນິຄົມຂອງພວກເຮົາ ແຕ່ເຫດການຮ້າຍແຮງກ່ວານ້ີໄດ້ເກີດ ຂ໊ຶ້ນກັບອັນທ່ີເອ້ີນວ່າ "ໄຫບ້ານໃກ້ອ ມຂ້າງ". ກຸນແຈບ້ວງຂອງ ຊາວບ້ານຍັງຄົງມີສະເຫນ ໃຈດຸດໃຈເດັກນ້ອຍນິຄົມຂອງພວກ ເຮົາ ຢູ່ຕໍ່ໄປ ແຕ່ມາຮອດປັດຈຸບັນມີການດຳເນີນທຸລະກິດແບບຮຸນຮ້ອຍ ທ່ີສຸດ ແລະຊົ່ງຄວາມສຳຄັນສົມກັບລະບົບການຈັດຕ້ັ ອັນສູງສົ່ງ. ມີ ແຕ່ພວກເດັກນ້ອຍຮຸ່ນເກົ່າເທ່ານັ້ນມີສິດອອກອາລະວາດຫ້ອງໃຕ້ດິນ ຂອງຊາວບ້ານ, ກັນຫ້ າມພວກຮຸ່ນນ້ອຍອອກຫ່ າງຈາກເລ ື່ອງນ ້ີ ທັ່ງໂຍນຄວາມຜິດໃຫ້ຢ່ າງບ ໍ່ ອ ິ ດ ູ ກ ູ ນ າ ແຕ່ຫ າ ກ ຈ ິ ງ ໃ ຈ ທ ີ ່ ສ ຸ ດ ໃ ສ ່ ຜ ູ ້ ໃ ດ ກ ໍ

ตามທີ່ພະຍາຍາມລົງໄປຫາກົນຕາມຫ້ອງນ້ຳໃຕ້ດິນວ່າ ເປັນຜູ້ລະ
ເມີດສິດສ່ວນໂຮມ. ພວກຮຸ່ນເກົ່ານັ້ນມີຄຸນສົມບັດດີເດັ່ນຂະຫນາດ
ວ່າແມ່ນແຕ່ລົ້ນພວກກູລັກເອງ ກໍບໍ່ຫານຕູ່ໂທດນິຄົມວ່າມີສ່ວນພົວ
ພັນໃນເລື່ອງຕາຍໆເຊັ່ນນີ້. ຍິ່ງໄປກວ່ານີ້ ຂ້າພະເຈົ້າເອງກໍເຂົ້າໃຈດີ
ແລ້ວວ່າ ຫົວຫນ້າຂະບວນດຳເນີນງານຊຸດນີ້ແມ່ນຄົນຂັ້ນຊຸ່ງອຊານ
ລະດັບສູງສົມຄວນເຊັ່ນ ມີເຕຍກົນນີ້ເອງ.

ມີເຕຍກົນ ເປັນຂະໂມຍໂດຍກຳເນີດ, ຢູ່ນິຄົມນັ້ນບໍ່ລັກຫຍັງ
ຫມົດ ທັງນີ້ຍ້ອນນັ້ນນັບຖືພວກຫມູ່ທີ່ດຳລົງຊີວິດຢູ່ໂຮມກັບນັ້ນ
ແລະເຂົ້າໃຈດີວ່າ ການກະທຳດັ່ງກ່າວມີແຕ່ຈະສ້າງຄວາມຄຽດແຄ້ນ
ເສຍຫາຍໃຫ້ແກ່ຫມູ່ຄູ່ນັ້ນເອງ. ແຕ່ຢູ່ຕະຫລາດໃນເມືອງກັບເຮືອນ
ຊາວນາພັ້ນບໍ່ມີຫຍັງລອດມືນັ້ນໄປເລີຍ. ໃນຕອນກາງຄືນ ນັ້ນມັກ
ອອກໄປຈາກນິຄົມເລື້ອຍໆ ຈັ່ງຊັ້ນໃນຕອນເຊົ້າ ການປຸກນັ້ນລຸກກົນ
ເຂົ້າເຊົ້າຈົ່ງເປັນນັ້ນຫາເລື້ອຍໆ. ໃນວັນອາທິດນັ້ນຂໍອອກໄປໃນ
ເມືອງເປັນປະຈຳ ແລະກັບຄືນມາໃນຕອນເດິກ, ບາງຄັ້ງໃສ່ຫມວກ
ເງົ້ບຫລືຜ້າພັນຄໍຜືນໃຫມ່ມານຳ ແລະອັນທີ່ຂາດບໍ່ໄດ້ກໍແມ່ນຂອງ
ຕ້ອນເຄື່ອງຝາກເລັກໆນ້ອຍໆມາໃຫ້ພວກເດັກນ້ອຍສະເຫມີ. ພວກ
ນີ້ຈົ່ງຮັກແລະຕິດມີເຕຍກົນຫລາຍ ແຕ່ຫມໍຫາກຊ່າງອຳບັງບັດຊະ
ຍາການລັກຢ່າງປິດແປນນີ້ໄວ້ ບໍ່ໃຫ້ພວກເດັກນ້ອຍຮູ້ເຫັນນຳ.

ກັບຂ້າພະເຈົ້ານັ້ນ ຍາມໃດກໍສະແດງຄວາມຍຳແຢງແຝງດ້ວຍ
ມິດຕະພາບຢູ່ເປັນນິດ ແຕ່ບໍ່ເຄີຍມີການເວົ້າຮອດເລື່ອງລັກຂະໂມຍ
ຈັກເທື່ອ ຂ້າພະເຈົ້າຮູ້ດີວ່າ ການໂອ້ລົມນີ້ຈະບໍ່ຊ່ອຍຫຍັງນັ້ນໄດ້
ເລີຍ.

ແຕ່ຢ່າງໃດກໍຕາມ ຂ້າພະເຈົ້າກໍຫາກຮູ້ສຶກເປັນຫ່ວງມິເຕຍກິນ ຢ່າງເລິກເຊິ່ງຢູ່ນັ້ນເອງ. ມັນສະຫລາດແລະມີພອນສະຫວັນຫລາຍ ກວ່າເດັກນ້ອຍຄົນອື່ນໆ ຈັ່ງຊັ້ນພວກເຂົາຈຶ່ງເຄົາລົບນັບຖືມັນທຸກ ກ້ອນຫນ້າ ມັນສາມາດສະແດງທາດແທ້ຂຶ້ກະໂນຍອອກມາພາຍໃຕ້ ຮູບການອັນມີສະເຫນ່ດຶງດູດໃຈເປັນທີ່ສຸດ ຈັ່ງຊັ້ນຍາມໃດກໍຈຶ່ງມີ ກຸ່ມເດັກນ້ອຍ ທັງຮຸ່ນແກ່ອ່ອນຫຸ້ມລ້ອມມັນຢູ່ເລີຍໆ. ກຸ່ມດັ່ງກ່າວ ຮັບເອົາຍຸດໂທບາຍຂອງ ມິເຕຍກິນ ມາປະຕິບັດເຊັ່ນການເຄົາລົບນິ ຄົມ ແລະຄູຜູ້ສິດສອນທັງມວນ. ໃນເວລາຄ່ຳມືດເຊັ່ນນີ້ ກຸ່ມເດັກ ນ້ອຍເຫລົ່ານີ້ຄຶດຫຍັງຢູ່ໃນຫົວຫລື? ເປັນການຍາກທີ່ຈະຮູ້ຄວາມ ຈິງ. ຈຳເປັນຈະຕ້ອງຕິດຕາມ ຫລືເອົາຜູ້ໃດຜູ້ຫນຶ່ງມາຊູ່ເຂັນສໍ້ສິນ ກ່ອນ. ແຕ່ຂ້າພະເຈົ້າຮູ້ສຶກວ່າຖ້າຈະເຮັດແນວນັ້ນ ຕົນເອງຈະເປັນ ຜູ້ສ້າງຄວາມສັບສົນໃຫ້ແກ່ສາຍພົວພັນ ລະຫວ່າງຄູສອນກັບພວກ ເດັກນ້ອຍຊຶ່ງມັນໄດ້ເກີດຂຶ້ນຢ່າງລຳບາກຍາກລຳຢູ່ພາຍໃນນິຄົມ ຂອງ ພວກເຮົາ.

ເມື່ອໃດຫາກຂ້າພະເຈົ້າຮູ້ເລື່ອງໃຈລະກຳອັນໃດອັນຫນຶ່ງ ຂອງ ມິເຕຍກິນ ຂ້າພະເຈົ້າໄຂການໂຈມຕີມັນຢູ່ໃນກອງປະຊຸມຢ່າງກ້າງ ໂລດ. ບາງຄັ້ງກໍໃສ່ໂທດ ຫລືເອີ້ນມັນເຂົ້າມາພົບຢູ່ໃນຫ້ອງການ ແລ້ວຊູ່ເຂັນຮ້າຍດ່າມັນແບບສອງຕໍ່ສອງໂລດ. ຕາມປົກກະຕິແລ້ວ ມັນຟັງຂ້າພະເຈົ້າຢ່າງນິ່ງໆ, ຄວາມສະຫງົບເຄັ່ງຂຶມແບບຫນ້າອັດ ສະຈັນຢ່າງຫນຶ່ງຄອບຄຸມໄປທົ່ວໃບຫນ້າເຊິ່ງແຈ່ມໃສ ດ້ວຍຮອຍຍິ້ມ ແຝງໄມຕີແລະອາລົມດີເປັນພິເສດ, ເມື່ອລາຈາກໄປ ມັນກໍເວົ້າດ້ວຍ ນ້ຳສຽງສຸພາບຫນ້າຮັກ ແລະຈິງຈັງຢ່າງສະຫ່ຳສະເຫມີວ່າ:

- ລາຕີສະຫວັດ ອາມໂຕນ ເຊມີອໂນວິດ.

ມັນຮັກສາກງດຊື່ສງາຂອງນິຄົມຢ່າງຈິງໃຈ ແລະໃຈຮ້າຍຂຶ້ນ ເຮງທຸກໆຄັ້ງທີ່ມີຜູ້ໃດຜູ້ຫນຶ່ງໄປເສຍທ່າມາ.

- ກູບໍ່ເຂົ້າໃຈວ່າ ເປັນຫຍັງຄົນເຮົາຈຶ່ງໂງ່ປານນີ້? ຢາກເຮັດ ແຕ່ເນອໂຕເຮັດບໍ່ໄດ້!

ຂ້າພະເຈົ້າຄຶດຄາດໄວ້ແລ້ວວ່າ ພວກເຮົາຈະຕ້ອງແຍກ ມິເຕຍ ກົນອອກໄປຕ່າງຫາກ ຕ່າງຈາກພວກເຮົາ ຂ້າພະເຈົ້າຮູ້ສຶກຂົມຂື່ນ ຍິ່ງຫນັກ ເມື່ອສຳນຶກເຖິງຄວາມໄຮ້ພະລັງຂອງຕົນເອງ ທັງຮູ້ສຶກ ລຳບາກໃຈແທນມັນນຳ. ກະໂຕມັນເອງກໍຄືກັນ, ແນ່ນອນມັນ ເຄີຍຄຶດແລ້ວວ່າ ບໍ່ມີເຫດຜົນໃດໆຫນົດທີ່ມັນຈະມາຢຸດຢູ່ກັບຫນຶ່ ແຕ່ໃນເມື່ອວ່າ ມັນເອງກໍຍັງບໍ່ຢາກຫນີຈາກນິຄົມບ່ອນມັນມີມິດສະ ຫາຍນ້ອຍໃຫຍ່ຕັ້ງຫລວງຫລາຍ, ບ່ອນທີ່ພວກເດັກນ້ອຍ ຕິດມັນ ອ້ອນຕ້ອນ ພໍປານຫມູ່ແມງວັນ ບິນໂຫ້ຕອມກ້ອນນ້ຳອ້ອຍ.

ອັນກັນດານກ່ວາຫມູ່ກໍແມ່ນວ່າ ບັດນີ້ ປັດຊະຍາຊີວິດຂອງມິ ເຕຍກົນ ເລີ່ມຂະຫຍາຍຕົວກົນໃຈພວກເດັກນ້ອຍ ເຊິ່ງເຄີຍຜ່ານ ການເຝິກຝົນຫລໍ່ຫລອມຫນັກແຫນ້ນມາແລ້ວເຊັ່ນ ການຮາບານົບ, ແວກຊະເນັບ, ໂອໂລຄອບແລ້ວ. ຄົນມີ ເບຍລູກົນຜູ້ດຽວເທົ່ານັ້ນ ທີ່ສະແດງຕົວເປັນຝ່າຍຄັດຄ້ານຢ່າງແທ້ຈິງ ແລະເປີດເຜີຍກັບມິ ເຕຍກົນ. ເປັນທີ່ຫນ້າສົນໃຈຢູ່ວ່າ ຄວາມເປັນປໍລະປັກຂອງພວກ ເຂົາບໍ່ປາກົດເປັນຮູບການປະທະແບບຮຸນແຮງຈັກເທື່ອ, ບໍ່ເຄີຍມີ ຈັກເທື່ອວ່າ ພວກເຂົາຈະຊົກຕີກັນເອງຫລືຜົດກຽງກັນແບບໂຕຕໍ່ໂຕ. ເບຍລູກົນ ປະກາດສຽງດັງຢູ່ໃນຫໍພັກວ່າ: ຕາບໃດທີ່ມິເຕຍກົນຍັງ

ຢູ່ໃນນິຄົມ ຕາບນັ້ນ ຂ້ຶກະໂມຍກໍບໍ່ຫນີດໄປຈາກນິຄົມຂອງພວກ ເຮົາຈັກເທື່ອ. ມີເຕຍກົນ ຟ້ງມັນເວົ້າດ້ວຍຮອຍຍິ້ມ ແລ້ວຕອບ ແບບໃຈດີວ່າ:

-ມັດເວີຍ ເອີຍ, ໂຕກໍຮູ້ຕີວ່າ ຊີໃຫ້ຫນີດທຸກຄົນຊ່ືສັດຄືກັນ ຫນີດນັ້ນ ມັນເປັນໄປບໍ່ໄດ້. ແລ້ວອັນຄວາມຊ່ືສັດສຸດຈະລຶດຂອງ ໂຕນັ້ນມັນຊີມີຄ່າມີຄຸນຫຍັງລະ ກ້າບໍ່ມີຄົນຄິດໂກງ ຂ້ຶກະໂມຍຄື ພວກເຮົາ. ເວົ້າໄປແລ້ວ ໂຕເປັນຫນ້ີພວກເຮົາຈ້ຳນ່າ.

-ເຮົາເປັນຫນ້ີໂຕວ່າຕ໊ີ! ໂຕຊ່າງຫາເລ່ືອງຂ້ຶຕິອະເກ່ັງແທ້ໆ ເນາະ.

-ໂຍ້ວກະຂອງມັນເປັນແນວນ້ີແທ້ໆ, ຈັ່ງຊ້ີນ່າຄືເອົາຫນ້ີ ເຮົາ ລັກເນາະ ສ່ວນໂຕບໍ່ລັກໂຕກໍເປັນຜູ້ມີກຽດ. ແຕ່ກ້າຫາກວ່າ ບໍ່ມີ ໃຜລັກໃຜ, ຫນີດທຸກຄົນກໍເທົ່າກັນ, ຈັ່ງຊ້ັນຕາມ ເຮົາແລ້ວ ເຮົາຄຶດວ່າ ອານໂຕນ ເຊມືອໂນວ໊ດ ຄືຊ່ືຄວນຮັບເອົາຄົນຄືພວກ ເຮົາເປັນພ່ີເສດ ບໍ່ຈັ່ງຊ້ັນຄົນຄືພວກໂຕກໍບໍ່ມີລາຄາຫຍັງຫນີດ.

-ຂ້ຶຕິອະ! -ເບຍລູກົນ ເວົ້າໃສ່ຄືນ. ມີຫລາຍໆປະເທດທ່ີບໍ່ມີ ຄົນຂ້ັລັກຂ້ຶກະໂມຍ ຄືແດ່ນມາກ, ສະວ໊ດ ກັບຊູເອດຈັ່ງຊ້ີ. ເຮົາ ອ່ານໃນປ້ຶມ. ເຂົາເວົ້າວ່າບໍ່ມີຂະໂມຍເລີຍ.

-ໂ..ອ່ຍ. ຂ...ຶ...ຂ້ຶ...ຕິອະ ອ້ອຍຕ້ອຍ! ແວກຊະ ເນ້ັບເວົ້າຂ້ັດຂ້ືນ, -ຍ ... ຢູ່ຟຸ້ນ ... ກະລັກກັນ ... ຢູ່ຫ້ັນລະ, ແລ້ວ ... ມັນດີ .. ບໍ ... ບ່ອນໃດ ... ຄັນບໍ່ມີຄົນຂ້ັລັກນະ? ນ້ຳ ຫນ້ຳປະເທດແດ່ນມາກ, ສະວ໊ດນ້ັນມັນ ມີຄວາມຫມາຍຫຍັງ? ບໍ່ ມີຫຍັງຫນີດ!

-ແລ້ວພວກເຮົາເດ້ ພວກເຮົາມີຫຍັງລະ ?

-ພໍ... ພວກເຮົາ ... ຫ. .ອະ... ແລ້ວຕໂ.. ຕຊິເຫັນດອກ... ພໍ... ພວກເຮົາ ... ມີການປະຕິວັດ. .

-ແຕ່ຄົນຄືພວກໂຕນີ້ຫວະ ແມ່ນຊະນິດທຳອິດເລີຍລະທີ່ຕ້ານການປະຕິວັດນະ!

ໃນເວລາກິກກຸງກັນແບບນີ້ ການາບານິບ ເປັນຜູ້ໂຫໂຫ ແລະ ຄຸງດແຮງກ່ວາຫມູ່ ຫນໍເຕັ້ນຂຶ້ນຈາກຕຸງຟາດກຳປັ້ນຕີອາກາດໄປ ມາ ແກ່ນຕາດຳປີ້ຂອງມັນສັກເສືອດໃສ່ ເບຍລູກິນ ຢ່າງໂກດແຄ້ນ:

-ແມ່ນໂຕອວດສະແດງຫຍັງລະຫັ້ນ? ໂຕຄຶດວ່າຄັນເຮົາກັບ ມີເຕຍກິນໄດ້ກິນອີ່ມດີພີມັນກ່ວາພວກໂຕແດ່ ມັນຊິຂັດຂວາງການ ປະຕິວັດຊັ້ນຫວະ? ໂຕໂລດດຶງເອົາທຸກຢ່າງມາພັນກ້ຽວເຂົ້າກັນ ຫມົດເນາະບໍ...

-ແລ້ວໂຕເປັນຫຍັງຈຶ່ງມາຫາເລື່ອງໃສ່ເຮົາລະ? ແຕ່ວ່າອັນນັ້ນ ມັນບໍ່ເປັນບັນຫາດອກ ມີແຕ່ວ່າຄົນຄືໂຕບໍ່ຕ່າງຫຍັງຈາກຫມູຊິໄປ ຫາດຸດດິນກິນ... ຂ... ທໍ່ນັ້ນລະ.

ມາຮອດທ້າຍລະດູຮ້ອນ ພຶດຕິກຳ ຂອງມີເຕຍກິນກັບລູກນ້ອງ ຂອງມັນແຜ່ລາມອອກໄປເກືອສວນຫມາກໂມຫມາກແຕງອ້ອມແອ້ມນິຄົມ. ສະໄຫມນັ້ນ, ຢູ່ໃນຂົງເຂດນີ້ການປູກຫມາກໂມຫມາກແຕງກຳລັງເປັນທີ່ນິຍົມກັນຢ່າງແຜ່ຫລາຍ ຊາວໄຮ່ຊາວສວນຜູ້ມີການະດີຫລາຍຄົນ ສະຫລະດິນໃສ່ການປູກຝັງອັນນີ້ເປັນຫລາຍໆເດ ເຊຍຕິນ.

ທຳອິດການລັກຫມາກແຕງ ເກີດຂຶ້ນບ່ອນລະເລັກລະນ້ອຍຕາມ

ພຸ່ມຫ່າງໆ. ຢູ່ອຸກຮາອຶນນັ້ນເພິ່ນກ໋ວ່າການລັກຫລອຍກິນເຄື່ອງປຸກ ຂອງຝັ່ງແບບນີ້ບໍ່ແມ່ນເລື່ອງຮ້າຍແຮງ ແຕ່ແນວໃດ, ຈັ່ງຊັ້ນພວກ ເດັກນ້ອຍໄທບ້ານເອງ ກໍ໋ຖືວ່ລ້ຳເຂົ້າສອນໄທເຮືອນໃກ້ຄ໋ຽງ ຜູ້ເຈົ້າຂອງສອນກໍ່ອະນຸໂລມໄປຕາມ ແຕ່ວ່າໃຜໃຈກ້ວ້າງໃຈແຄບ, ໃນ ໄຮ່ກ້ວ້າງຂະຫນາດຫນຶ່ງເດ ເຊຍຕິນນີ້ ເພິ່ນປູກຫມາກໂມໄດ້ຮອດ ສອງຫມື່ນຫນ່ວຍ ຈັ່ງຊັ້ນໃນລະດູຫນຶ່ງ ການໄປກິນໄປລັກດ້ວມສອງ ສາມຮ້ອຍຫນ່ວຍ ກໍ່ບໍ່ສ້າງຄວາມເສຍຫາຍໃຫຍ່ຫລວງອ໋ຶຫຍັ້ງພໍ ເທົ່າໃດ ຢ່າງໃດກໍ່ຕາມ ຢູ່ການສອນກໍ່ຫາກມີຕຸບນ້ອຍໆຫລັ້ງຫນຶ່ງ ໃຊ້ເປັນບ່ອນນອນຂອງຊາຍຊະລາເຊິ່ງບໍ່ມີຫນ້າທ໋ີ່ປົກປັກຮັກສາ, ແຕ່ ຄອຍຈົດຈຳພວກແຂກທ໋ີ່ບໍ່ໄດ້ຮັບເຊີນທັ້ງຫລາຍພຸ້ນຫລາຍກ່ວາ.

ບາງເທ໋ືອພວກພໍ່ເກ໊ົ້າເຫລ່ານ໋ີ ກໍພ້ວກັນມາຟ້ອງຂ້າພະເຈົ້າ:

-ມ໋ືອານ໋ີ ພວກເດັກນ້ອຍຂອງເຈົ້າໄປບຸກສວນຫມາກແຕ ,ບອກເຂົາແດ່, ມັນບໍ່ດ໋ີໃດ. ໃຫ້ພວກເຂົາໄປຫາຂ້ອຍຢູ່ຕຸບພຸ້ນດ໋ີ ກ່ວາ, ຟ້າເອ໋ີຍ! ຄົນເຮົາມັນກໍ່ຊ່ວຍລ້ຽງເກ໋ືອ໋ື່ກັນແລະກັນຢູ່ທັ້ນ ແລ້ວ, ຂໍແຕ່ໃຫ້ບອກມາທັ້ນເທາະ ຂ້ອຍຊ໋ືອກຫມາກໂມຫນ່ວຍ ແຊບໆສຸກໆໃຫ້ພວກເຂົາກິນເອງເລ໋ືຍແຫລະ.

ຂ້າພະເຈົ້າສົ່ງຂ່າວຈາກຊາຍຊະລາໃຫ້ພວກເດັກນ້ອຍຮູ້, ໃນ ຕອນແລງມ໋ືດງວກັນນັ້ນໂລດ ພວກເຂົາອອກໄປທົດສອບຂ໋ໍ້ສະເຫນ ີ ຂອງຊາຍຊະລາ ແຕ່ກໍ່ມ໋ີອັນດັດແປງເລັກໆນ້ອຍໆ. ໃນຂະນະທ໋ີ ພວກຫນຶ່ງກໍ່ລັງກິນຫມາກໂມຫນ່ວຍງາມທ໋ີ່ພໍ່ເກ໊ົ້າໄປຫາມາໃຫ້ກັບ ມ໋ືລາວເອງ ຢູ່ເທ໋ິງຕຸບນ້ອຍ ທັ້ງໂອ້ລ໋ືມກັນຢ່າງກ໋ືກອ໋ືກ໋ືກໃຈ ໂດຍ ເວ໋ົ້າປຽບທຽບຫມາກໂມປ໋ືກາຍກັບຫມາກໂມ ສະໄຫມເຮັດສ໋ິງຄາມ

ກັບຍີ່ປຸ່ນຢູ່ນັ້ນ ພາກສວນອີກຕອນຫນຶ່ງກໍກາຍເປັນເຫຍື່ອອັນແຊບ ນິວຂອງນັກບຸກຮຸກພວກຫນຶ່ງຊຶ່ງພາກັນເກັບປົດເອົາ ຫມາກໂມຍັດ ໃສ່ປອກຫມອນ, ກົ້ງໄກ່ແລະໂຕ່ງເສື້ອຢ່າງບໍ່ປາກບໍ່ເວົ້າຫຍັງຫມົດ. ແລ້ງນັ້ນກ່ອນຈະອອກໄປຕາມຄໍາເຊີນຊວນ ແບບມີນ້ໍາໃຈຂອງຊາຍ ຊະລາແວກຊະເນັບໄດ້ອອກປາກສະເຫນີໃຫ້ມັດເວີຍ ເບຍລູກິນ ໄປ ເປັນຜູ້ທໍາອິດກ່ອນ ພວກເດັກນ້ອຍຜູ້ອື່ນໆບໍ່ອອກປາກຄັດຄ້ານແຕ່ ຢ່າງໃດ, ມັດເວີຍກັບມາແຕ່ສວນຫມາກແຕງດ້ວຍຄວາມພໍໃຈເປັນ ທີ່ສຸດ:

-ເອ້ີ..ແບບນີ້ຄັກເວ້ີຍ, ດີແທ້ໆ; ເຮົາໄປລິມກັບພໍ່ເກົ້າ ... ລາວກໍດີໃຈ.

ແວກຊະເນັບ ນັ່ງຢູ່ເທິງແປ້ນມ້າຫ້ອຍໆແບບຄົນທຸ່ນທ່ຽງ ກາຣາບານິບ ໂປໂລເຂົ້າມາໃນຫ້ອງແລ້ວຖາມວ່າ:

-ຈັ່ງໃດເວ້ີຍ ມັດເວີຍ ສວນແຕງຄັກບໍ?

-ກະຄຶດວ່ານັ້ນແລ້ວ ເຊມີຍ໋ ເຮົາເຄີຍບອກໂຕແລ້ວເດ້ວ່າ ພວກເຮົາຢູ່ຮ່ວມກັບພວກຊາວບ້ານແບບເປັນຄົນບ້ານໃກ້ເຮືອນຄຽງ ທ່ີ່ດ໋ໍ່ກັນໄດ້.

-ເອ້ີ ... ສໍາລັບໂຕນັ້ນກະດີຫັ້ນແລ້ວ ... ໂຕກິນຫມາກແຕງຈີນ ອີ່ມແປ້ເລີຍ, ແຕ່ພວກເຮົາເດ້ລະ?

-ໂຕກະໄປຍາມລາວເອງເທາະແມ້!

-ຄັກເນາະ. ແບບນ້ີ້ນະ, ໂຕບໍ່ອາຍແດ່ຫວະ? ພໍ່ເກົ້າລາວ ເຊີນພວກເຮົາ ຈັ່ງຊັ້ນເລີຍພາກັນໂຫ້ໄປຫມົດ, ແບບນ້ີ້ນັ້ນໂພດໄປ ເວ້ີຍ ພວກເຮົາໂລດມີນໍາກັນຕັ້ງ ຝ0 ໄດ໋.

ນ້ຳໝາ ແວກຊະເນັບ ຊວນ ເບຍລູກິນໄປຫາພໍ່ເກົ້າກາງສວນ ອີກ ແຕ່ຝ່າຍນີ້ປະຕິເສດແບບຄົນໃຈກ້ວາງວ່າໃຫ້ຄົນອື່ນໄປແທນ.

-ແລ້ວເປັນຫຍັງເຮົາຊິໄປຫາຄົນອື່ນອີກລະ? ໄປນ່າ.. ໂຕບໍ່ກິນກະບັ່ງລົມກັບລາວຊິ່ໆ.

ເບຍລູກິນເຫັນວ່າ ແວກຊະເນັບເວົ້າກ໊ຶກ ຈັ່ງຊັ້ນຫມໍ້ກໍເລີຍ ເຫັນດີຕາມແນວຄວາມຄິດນີ້: ໄປຢາມພໍ່ເກົ້າຊິ່ໆ... ລາວຈະເຫັນ ເອົາເອງວ່າ ພວກເດັກນ້ອຍນີຄົນນັ້ນມາຫາລາວບໍ່ແມ່ນແຕ່ເພື່ອຊິ ກິນຫມາກໂມເທົ່ານັ້ນ.

ແຕ່ເທື່ອນີ້ ພໍ່ເກົ້າຕ້ອນຮັບພວກເຂົາແບບບໍ່ເປັນທ່າເລີຍ ແລະ ເບຍລູກິນກໍບໍ່ສາມາດເຮັດແນວໃດໃຫ້ລາວເຂົ້າໃຈເລີຍ ກົງກັນຂ້ານ ມີແຕ່ຊາຍຊະລາເທົ່ານັ້ນທີ່ເຍິງປືນໃສ່ຫົ້ງເວົ້າວ່າ:

-ນ້ຳວານນີ້ ຂະນະທີ່ພວກສູຈ່ອງຂາກູໄວ້ຫນ້ີ, ພັກພວກສູຊ້ຳ ຍ່ຳສອນຫມາກແຕງຟາກນັ້ນຈົນມຸ່ນອຸ້ຍປຸ້ຍ ເຮັດແນວນ້ີຊິໄດ້ຫວະ? ຢ່າເດ້ີ... ກູເຫັນແລ້ວວ່າ ຕ້ອງຈັດການກັບພວກສູແບບໃຫມ່. ກູຊິ ຍິງໂລດບັດນ້ີນະ...

ເບຍລູກິນ ກັບມານິຄົມດ້ວຍຄວາມອັບອາຍຂາຍຫນ້າ, ຫມໍ ຮ້າຍດ່າອາລະວາດຢູ່ໃນຫ້ໍພັກ ສ່ວນພວກອື່ນໆ ພາກັນຫົວຂວນ ມີ ເຕຍກິນເວົ້າໃສ່ວ່າ:

-ແລ້ວໂຕຊິຫ່ວງຫຍັງລະ, ຕາເກົ້ານັ້ນອາດຊິມາວ່າຈ້ວງໂຕ ໄປເປັນທະນາຍໃຫ້ລາວຫວະ? ນ້ຳວານນ້ີໂຕຊັດຫມາກໂມຫນ່ວຍ ແຊບໆຂອງລາວຢ່າງຜູ້ມີກຽດ. ແລ້ວໂຕຍັງຊິຢາກໄດ້ຫຍັງອີກ?

ສ່ວນພວກເຮົາຫລະ? ອາດແມ່ນຢູ່ວ່າພວກເຮົາກະແຫນ້ນທ້ອງໄປ ຄືກັນ ແຕ່ພໍ່ເກົ້ານັ້ນມີພະຍານຫລັກຖານອັນໃດລະ?

ພໍ່ເກົ້າເຝົ້າສອນບໍ່ມາຫາຂ້າພະເຈົ້າອີກ ແຕ່ມີສັນຍານຈະແຈ້ງ ຫລາຍອັນບົ່ງບອກວ່າ ການລັກຫມາກແຕງມາກິນຢ່າງເປັນຂະບວນ ໄດ້ກໍ່ຫລອດຂຶ້ນແລ້ວ.

ເຊົ້າມື້ຫນຶ່ງ ເມື່ອໄປຫໍພັກຫລັງຫນຶ່ງ ຂ້າພະເຈົ້າເຫັນວ່າ ພື້ນ ທ້ອງເຕັມໄປດ້ວຍເປືອກຫມາກໂມຫມາກແຕງ ຂ້າພະເຈົ້າດຶງຫົວ ທ້າວເປັນຍາມປະຈຳວັນມາລົງຊຸດ, ລົງໂທດຜູ້ໃດຜູ້ຫນຶ່ງແລ້ວສັ່ງ ວ່າ ຢ່າໃຫ້ເກີດເລື່ອງແບບນີ້ອີກເປັນເທື່ອທີ່ສອງ, ໃນຊຸມມື້ຕໍ່ມາ ຫໍພັກນອນກໍສະອາດກ້ຽງແປນເປັນປົກກະຕິຄືນ.

ເວລາແລງຄ້ອຍຄ່ຳອັນສະຫງົບງຽບສະຫວ່າງສະເຫວີຍໃນຍາມ ລະດູຮ້ອນ ເຕັມໄປດ້ວຍສຽງໂອ້ລົມຄ່ອຍໆ ບັນຍາກາດອົບອຸ່ນ ແລະ ສຽງຫົວແຈ່ມໃສ ບາດຄ່ອຍບາດແຮງຂອງພວກເດັກນ້ອຍກໍຄ່ອຍໆ ຮ້ອງລົງກາຍເປັນລາຕິການທີ່ແຈ້ງສະຫວ່າງງົດງາມ.

ທ່ວນີ້ຄົນຫລັບນຶດຊ້ອຍນ້ອຍຢູ່ທ່າມກາງຄວາມຄຶດຝັນ ກິ່ນ ຫອມໂຮຍຮວນຂອງປ່າແປກແລະຜັກຫອມ, ສຽງຮ້ອງວ່ອນຂອງ ຫມາດ່ຳມາແຕ່ໄກໆເປັນໄລຍະໆ. ຂ້າພະເຈົ້າອອກມາຍືນຢູ່ລະບຽງ ຕຶກ ນັກຮຽນຜູ້ເຮັດຫນ້າທີ່ເວນຍາມໂປໂລຫົວອອກມາຈາກແຈ ຫນຶ່ງ ແລະກ່າວໂມງເວລານຳຂ້າພະເຈົ້າ ຫມາບັກກ່ານ ບູເກ້ ຍ່າງ ວິນອງນໄປມາຕິດຕາມ ນາຍຍາມຍ່າງໃກ້ຊິດ. ໃນຍາມຄ່ຳຄືນທີ່ ເຢັນຫນາວແລະແຈ່ມໃສເຊັ່ນນີ້ ພວກເຮົາສາມາດໄປນອນຕາຫລັບ ໄດ້ແລ້ວ.

ແຕ່ຢູ່ເບື້ອງຫລັງຄວາມງຽບສະຫງັດຫນ້າຫນັ້ນໃຈຊຸ່ນນີ້ ຊ້ຳມີ ເຫດການປະເພດທັງສັບສົນທັງຫນ້າຕື່ນເຕັ້ນລະເບີດຂຶ້ນ.

ເທື່ອຫນຶ່ງ ອີວານ ອີວານໂນວິດ ມາກາມຂ້າພະເຈົ້າວ່າ:

- ອັນເລື່ອງປ່ອຍໃຫ້ມ້າອອກມາຍ່າງລ້ວເລ້ຍຢູ່ກາງເດີ່ນໃນຕອນກາງຄືນແນວນີ້ ກໍແມ່ນຄຳສັ່ງຂອງເຈົ້າເບາະ? ອາດຊິມີຄົນມາລັກມ້ານໄປໃດ໋.

ບຣາເຊັນໂກ ສະແດງທ່າທີບໍ່ພໍໃຈທັນທີ.

- ຊັ້ນມ້າບໍ່ມີສິດອອກມາຫັນໃຈເອົາອາກາດສົດໆແດ່ຊັ້ນຫວະ?

ສອງນົ່ຕ໋ມາ ກາລິນາ ອີວານໂນວິດ ຊ້ຳມາກາມຕື່ມວ່າ:

- ອັນມ້າຫັ້ນມັນເປັນຫຍັງເກາະ? ຄືວ່າມາສ່ອງເຂົ້າໄປແຕ່ໃນຫ້ຳພັກເດັກນ້ອຍແທ້?

- ແມ່ນຫຍັງເກາະ?

- ເຈົ້າອອກໄປເບິ່ງເອງແມ້ ແຕ່ເຊົ້າໆເລີຍລະ ພວກມັນໄປຊອມຢູ່ແຄມປ່ອງຢ້ຽມແລ້ວເດ້. ແມ່ນພາກັນໄປເຮັດຫຍັງຢູ່ຫັ້ນບຸ?

ຂ້າພະເຈົ້າອອກມາພິສູດຂໍ້ຄິດເຫັນອັນນີ້: ເປັນຄວາມຈິງແທ້ ພໍແຕ່ຮຸ່ງເຊົ້າຂຶ້ນມາເທົ່ານັ້ນ ມ້າທຸກໆໂຕ ຈົນກະທັ້ງງົວບັກກາວຣິອຸ ຊະກາ ເຊິ່ງຫົວຫນ້າເສດກະກິດພະແນກສຶກສາປະຊາຊົນ ຍົກເປັນ ຂອງຂວັນໃຫ້ພວກເຮົາຍ້ອນລາວບໍ່ຮູ້ຈະຈັດການກັບມັນ ແນວໃດດີ ທັງມັນກໍເກົ່າແກ່ຫລາຍແລ້ວຫັ້ນ ພາກັນມາຢືນຊອມຢູ່ຊ່ຶປ່ອງຢ້ຽມ ຫ້ຳພັກເດັກນ້ອຍ, ພວກມັນຢືນຢູ່ລະຫວ່າງພຸ່ມດອກໄມ້ ເປັນເວລາ ດົນນານບໍ່ເຫນັງຕີງ. ແນ່ນອນວ່າພວກມັນກຳລັງລໍ້ຖ້າສິ່ງໃດສິ່ງ ຫນຶ່ງ ເຊິ່ງພວກມັນພໍອົກພໍໃຈເປັນແນ່.

ຂ້າພະເຈົ້າເຂົ້າໄປໃນຫ້ໍພັກແລ້ວກ່າວຂຶ້ນວ່າ :

- ເປັນຫຍັງນ້ໍາຈຶ່ງມາເຝົ້າປ່ອງຢ້ຽມພວກສູຢູ່ແນວນີ້ ?

ໂອປຣິສໂກ ໂງ່ຫົວຂຶ້ນຈາກຕຽງ, ເສືອດຕາມາເບິ່ງທາງນອກ ບາດຫນ້ໍ ກັ້ນຫົວໄວ້ແລ້ວຮ້ອງວ່າ :

- ເຮ້ີຍເຊຣິໂອຊາ ໂຕຫັ້ນນ່າໄປກ່າມພວກຈ້ໍາຫມູ່ນັ້ນດູວ່າ ພາກັນຢູ່ຫນີ້ເຮັດຫຍັງ ?

ຫລາຍຄົນຫົວໂຕຂຶດໂຕແຂ່ງຢູ່ໃນຜ້ໍາຫົ່ມ, ນິເຕຍກິນ ບິດຂ້ີ ຄ້ານແລ້ວເວ້ົາສຽງຕ່ໍາຫ້ໍາວໆວ່າ :

- ບ່ໍຄວນຊິເອົາສັດສະຫລອກກອກຂະຫນາດນ້ີ ມາໄວ້ນິຄົມ ເວ້ີຍ ... ເບ່ົາດູບັດນ້ີກ່ໍເລີຍເຮັດໃຫ້ຈຸ່ນວາຍຊ້ໍາ ...

ຂ້າພະເຈົ້າກ່ົາໄປຫາ ອານໂຕນ ຮ້ໍາຍວ່າ :

- ແມ່ນພວກສູເຮັດອ່ີຫ້ັງເວ່ົາກັບແບບນ້ີ ? ເປັນຫຍັງນ້ໍາ ຈ່ຶງມາ ຢືນເຝົ້າປ່ອງຢ້ຽມແບບນ້ີທຸກເຊ້ົາ ? ພວກສູ ດ່ຶງດູດນ້ັນມາແບບໃດ ?

ເບຍລູກິນ ຊຸກອານໂຕນອອກໄປ :

- ອານໂຕນ ເຊມ່ືອໂນວ່ິດ ... ເຈ້ົາບ່ໍຕ້ອງເປັນຫ່ວງດອກ, ບ່ໍມ່ີ ຫຍັງເປັນອັນຕະລາຍ ສ່ໍາລັບນ້ໍາເລີຍ, ອານໂຕນຕ້ັງເອົາພວກນ້ັນ ອອກມາ ກ່ໍຍ້ອນວ່າ ມ່ືອາຫານດ່ຶງສ່ໍາລັບພວກນ້ັນ.

- ມ່ຶງ ... ມ່ຶງເຊ່ົາເວ້ົາເທາະ ! - ກາຣາບານ ນິບເວ້ົາຂ້ຶນ.

- ພວກເຮົາພວມຊ່ິບອກເຈ້ົາພ່ໍດ. ໃນເມ່ືອວ່າ ເຈ້ົາຫ້ໍາມບ່ໍໃຫ້ ກ່ົມເປ່ືອກຫມາກໂມຫມາກແຕງລ່ົງພ້ືນຫ້ໍອງ ແລ້ວກ່ະຍ້ອນວ່າ ຍາມໃດ ຜ້ໍໃດຜ້ໍຫນ່ຶງຢູ່ນ້ີ ຊ້ໍາພ້ັດບ້ັງເອ່ີນໂຊກດ່ີໄດ້ຫມາກໂມມາຈ້ັກ ຫນ່ວຍ ...

- ເປັນຫຍັງຈົ່ງວ່າ "ໂຊກດີ" ?

- ເປັນຫຍັງຊິບໍ່ໂຊກດີລະ ? - ລາງເທື່ອຕາເກົ້ານັ້ນເອົາໃຫ້ ບາງ ເທື່ອກະແມ່ນພວກໄທບ້ານເອົາມາ ...

- ບາດນີ້ ພໍ່ເກົ້ານັ້ນໃຫ້ຂອງຂ້ວນພວກສູຫວະ ?, ຂ້າພະເຈົ້າ ກາມແບບເຍ້ຍໆ.

- ກະທັ້ງລາວ ຫລືຜູ້ອື່ນໆຫັ້ນແລ້ວ .. ຈັ່ງຊັ້ນຊິເອົາເປືອກມັນ ໄປກົ້ມທາງໃດ ? ຈັ່ງຊັ້ນ ອານໂຕນ ກໍເລີຍເອົາມ້າມາທ່ຽວທາງນີ້ຊັ້ນ ນ່າ ພວກເດັກນ້ອຍກໍເລີຍເອົາອົກເອົາໃຈພວກມັນຢ່າງໃຫຍ່.

ຂ້າພະເຈົ້າອອກຫນີຈາກຫໍພັກໃນທັນທີ.

ຫລັງຈາກກິນແລງແລ້ວ, ມີເຕຍກິນ ເອົາຫມາກໂມໃຫຍ່ ຫນ່ວຍຫນຶ່ງມາໃຫ້ຂ້າພະເຈົ້າຢູ່ໃນຫ້ອງການ.

- ເອົາມາໃຫ້ເຈົ້າຊິມລອງເບິ່ງ, ອານໂຕນ ເຊມືອໂນວິດ.

- ໂຕເອົາມາແຕ່ໃສ ? ເອົາອອກໄປດຽວນີ້ ! ນັບແຕ່ບັດນີ້ໄປ ... ກູຊິຈັດການກັບພວກສູຢ່າງຈິງຈັງລະ.

- ພວກເຮົາໄດ້ມັນມາຢ່າງກຶກຕ້ອງທໍາມະດາທີ່ສຸດ ເລືອກເຟັ້ນ ສະເພາະມາໃຫ້ເຈົ້ານ່າ, ພວກເຮົາຈ່າຍຄ່າຫມາກໂມຫນ່ວຍນີ້ໃຫ້ພໍ່ ເກົ້າດ້ວຍເງິນຂອງພວກເຮົາແທ້ໆເລີຍລະ, ສ່ວນທີ່ວ່າ ເຈົ້າຊິຈັດ ການກັບພວກເຮົານັ້ນກະບໍ່ໄວໂພດດອກ, ພວກເຮົາຈະບໍ່ຄົງບໍ່ຂົ້ມ ຫຍ້າດອກ.

- ອອກໄປ ... ເອົາຫມາກໂມກັບຂີ້ປາກມຶ້ໄປພ້ອມດຽວນີ້ !

ຕໍ່ມາ ປະມານສິບນາທີ ກໍມີຕົວແທນເປັນຄະນະກັບມາພ້ອມ ດ້ວຍຫມາກໂມຫນ່ວຍເກົ່າ. ຂ້າພະເຈົ້າຕ່າງໃຈທີ່ເຫັນວ່າ ໂຄສິກ

ຂອງພວກເຂົາແມ່ນ ເບຍລູກິນ ເຊິ່ງກັ້ນຫົວໄວ້ນຳ ເພື່ອເວົ້າອອກ
ແຕ່ລະຄວາມ.

-ພວກສັດເຫລົ່ານັ້ນເກາະ ອານໂຕນ ເຊມີວໂນວິດ, ເຈົ້າຮູ້
ບໍ່ວ່າໃນແຕ່ລະຄືນພາກັນຍັດຫມາກໂມຜູ້ລະທໍ່ໃດ! ເປັນຫຍັງຈຶ່ງຊິ
ປົດບັງເລື່ອງນີ້ໄວ້ອີກລະ? ແຕ່ຫມໍໂອໂລຄອບຜູ້ດຽວ ... ເອີ... ເອົາ
ລະຢ່າຊະ ພວກເຂົາຫາມາໄດ້ແນວໃດນັ້ນເປັນເລື່ອງລະຫວ່າງຈິດ
ສຳນຶກຂອງພວກເຂົາກັບໂຕພວກເຂົາເອງ ແຕ່ຂ້ອຍບໍ່ປະຕິເສດດອກ
ວ່າພວກເຂົາໄດ້ເຮັດໃຫ້ຂ້ອຍແຊບອີ່ມໄປນຳຄືກັນ, ພວກໂຈນຫ້າ
ຮ້ອຍຫມູ່ນີ້ ມັນຮູ້ຈັກຈຸດອ່ອນໃນດວງວິນຍານທີ່ເຍົາໄວຂອງຂ້ອຍ...
ຂ້ອຍມັກກິນຫມາກໂມຫລາຍ ... ແມ່ນແຕ່ພວກແມ່ຍິງກະຍັງໄດ້ຍົກ
ຕາໃດ່ຫນີ. ພວກເຂົາເອົາມາໃຫ້ຮອດໂຕສະກາກິນນຳ. ຂ້ອຍຂໍ
ເວົ້າວ່າໃນສີ່ຫ້ອງຫົວໃຈຂອງພວກເຂົານັ້ນ ບໍ່ອາດມີຫ້ອງໃດຫ້ອງ
ຫນຶ່ງ ຊ່ຳບັນຈຸຄວາມຄັບແຄບໄວ້ໄດ້ດອກ. ຈັ່ງຊັ້ນຫລະ, ພວກ
ເຮົາຮູ້ດີວ່າ ເຈົ້າເອງຈະບໍ່ແຕະຕ້ອງມັນ ຍ້ອນວ່າຫມາກໂມອັບປີຫມູ່
ນີ້ຈະເຮັດໃຫ້ເຈົ້າຄຶດອະເຫຍີອງ. ແຕ່ວ່າ ຂໍໃຫ້ເຈົ້າຮັບເອົາຂອງ
ຕ້ອນເລັກໆນ້ອຍໆອັນນີ້ເທາະ, ຂ້ອຍເອງກໍເປັນຄົນຮູ້ຜູ້ດີເດ້ບໍ່ຄືຫມໍ
ແວກຊະເນັບໃດ ຊັ້ນເຈົ້າກໍສາມາດເຊື່ອຂ້ອຍໄດ້ໂລດ ເມື່ອຂ້ອຍວ່າ
ພວກເຮົາຊື້ຫມາກໂມຫນ່ວຍນີ້ນຳພໍ່ເກົ່າກໍແມ່ນຊື້ແທ້ໆ ບາງທີພວກ
ເຮົາອາດຈະຈ່າຍໃຫ້ລາວສູງກ່ວານີ້! ກ້ອນຫີນແຮງງານມະນຸດຜູ້
ຫນຶ່ງສຸມໃສ່ການຜະລິດຂອງລາວແລ້ວນ່າ ຄືດັ່ງເວົ້າໄວ້ຢູ່ວ່ອີທະຍາ
ສາດວ່າດ້ວຍການເມືອງເສດກະສາດຫັ້ນລະ.

ເມື່ອສະຫລຸບລົງແນວນີ້ແລ້ວ ເບຍລູກິນກໍວາງທ່າເຄັ່ງຂຶມຂົ້ນ

ໂລດ, ມັນວາງຫມາກໂມໃສ່ໂຕະຂ້ອຍແລ້ວຫາຍໂຕໄປຢ່າງງ່າຍໆ.

ຕາມເຄີຍ, ແວກຊະເນັບ ຜູ້ເຫງົາກຫງາກແລະໃຮ້ລະບຽບເສືອກ ແສງຕາຂ້ານບ່າ ນິເຕຍກົນ ມາແລ້ວເວົ້າວ່າ:

- ນີ້... ນ ມັນແມ່ນ.. ເສດກະສ... າດກ... ການເມືອງ ບໍ່... ບໍ່ແມ່ນ... ກ... ການເມືອງເສດກະສາດ!

- ມັນກໍອັນດຽວກັນນັ້ນລະ! - ເບຍລູກົນບອກ.

ຂ້າພະເຈົ້າງາມພວກເຂົາວ່າ:

- ສູຈ່າຍເງິນໃຫ້ພໍ່ເກົ້າແບບໃດ?

ກາຣາບານົບ ຫັກນ້ົວມ໊ເຂ້ານ້ົວຫນ໋ຶ່ງແລ້ວວ່າ:

- ແວກຊະເນັບ ຈອດາວໃສ່ເຍືອກໃຫ້ລາວຫນ່ວຍຫນ໋ຶ່ງ, ຫນໍ ກູດ ຕາບເກີບໂບກໃຫ້ລາວແລະຂ້ອຍຢູ່ຍາມແທນລາວເຄ໋ຶ່ງຄືນ.

- ຊັ້ນກູພໍຮູ້ແລ້ວວ່າ ສູກົນຫມາກໂມໄປຫມົດທໍ່ໃດຕົ້ມໃນຄືນ ນ້ົ... ຕົ້ມໃສ່ຫນ່ວຍນ້ົນະ!

- ແມ່ນແລ້ວ, ແມ່ນແລ້ວ! - ເບຍລູກົນເວົ້າຂ໋ຶ້ນ, - ອັນນ້ົ ຂ້ອຍຮັບປະກັນໄດ້ດ້ວຍກຽດເລີຍລະ. ບັດນ້ົພວກເຮົາລ໋ຶ່ງແກ່ວນກັນ ດີແລ້ວກັບຕາເກົ້ານ້ົ່ນ. ແຕ່ວ່າຢູ່ແຄມປ່າເບ໊ົ້ອງຫນ໋ຶ່ງນ້ັນຕ໊ົ ຍັງມ ສອນແຕ່ງອົກບ່ອນຫນ໋ຶ່ງ ພໍ່ເກົ້າອັບປ໊ົ້ຂ໊ົ້ໂຫດທ໊ົ່ສຸດຄົນຫນ໋ຶ່ງເຝົ້າຢູ່, ລາວຍ໋ຶ່ງປືນຕະຫລອດເວລາ...

- ໂອ່... ບັດນ້ົ໊ຶ່ງກະອອກເລາະສອນຫມາກແຕ່ງຫວະ?

- ບໍ່... ຂ້ອຍບໍ່ໄດ້ໄປດອກ ແຕ່ຂ້ອຍໄດ້ຍິນສ໋ຽງປືນຂອງລາວ, ບາງເວລາພວກເຮົາກາຍໄປທາງນ້ັນແດ່.

ຂ້າພະເຈົ້າຈ໋ຶ່ງຂອບໃຈພວກເຂົາສໍາລັບຫມາກໂມຫນ່ວຍງາມ.

ບໍ່ເທົ່າໃດມື້ຕໍ່ມາ ຂ້າພະເຈົ້າເຫັນ "ເກົ້າອັບປີ" ທີ່ວ່າມາຫາ, ທ່າທາງບອກວ່າໂມໂຫສຸດຂີດ.

- ແມ່ນຊິໃຫ້ເຮັດແນວໃດ ບັດນີ້ນະ? ແຕ່ກໍ່ພວກມັນພາກັນໄປລັກໃນຕອນກາງຄືນ ບັດນີ້ຮອດກາງເວັນກະບໍ່ເວັ້ນ... ບໍ່ຈັກຊິວ່າແນວໃດ ... ມາກັນເປັນຫມູ່ເປັນຫມວດຍາມກິນເຂົ້າຊ້ຳ ... ພວກເຜດ! ຄັນວ່າແລ່ນນຳຜູ້ຫນຶ່ງ ອີກພວກຫນຶ່ງຊ້ຳຍຸ່ທາງຍ່ຳໄປທົ່ວສອນຕາມໃຈຊອບມັນເລີຍ

ຂ້າພະເຈົ້າຊູ່ພວກເຂົາວ່າ ຈະໄປເຝົ້າສວນຫມາກແຕງຊ່ວຍພໍ່ເກົ້ານັ້ນເອງ ຫລືບໍ່ກໍເອົາເງິນຂອງນຶ່ງຄົນໄປຈ້າງຄົນຍາມຕື່ມ.

ມີເຕຍກິນເວົ້າວ່າ:

- ເຈົ້າຈົ່ງເຊື່ອເກົ້າຮ່ານັ້ນໂລດ, ພວກເຮົາບໍ່ໄດ້ວ່າຊິສິນນຳຫມາກໂມລາວດອກ. ມີແຕ່ວ່າ ລາວບໍ່ຍອມໃຫ້ພວກເຮົາກາຍໄປແຄມທົ່ງນັ້ນຊື່ໆດອກ.

- ແລ້ວພວກສູຈຳເປັນຫຍັງຈົ່ງກາຍໄປທາງນັ້ນລະ? ມັນທາງທ່ຽວຂອງພວກສູຫວະ?

- ມັນບໍ່ກ່ຽວຫ້ຍັງກັບລາວຕ່ວາ ... ພວກເຮົາຊິໄປທາງໃດກໍດາຍ ແລ້ວເປັນຫຍັງຊິຕ້ອງຍົງປືນໃສ? ອີກມື້ຫນຶ່ງຕໍ່ມາ ເບຍລຸກິນ ໄດ້ມາບອກເຕືອນຂ້າພະເຈົ້າ ວ່າ:

- ເລື່ອງມັນແຮງຂຶ້ນໆແລ້ວເດີ້ກັບພໍ່ເກົ້ານີ້ນະ, ພວກນັ້ນຂົ້ນແຮງແລ້ວໃດ໋. ເກົ້ານັ້ນຍ້ານແຮງເລີຍເອົາຫມູ່ມາຊ່ວຍອີກສອງຄົນ ມີປືນພ້ອມທຸກຄົນ. ພວກເດັກນ້ອຍຫມູ່ນັ້ນ ເຂົາຊິບໍ່ຍອມລະ.

ໃນຄືນດຽວກັນນັ້ນເອງ ພວກເດັກນ້ອຍນຶ່ງຄົນກໍຍົກຂະບວນກະ

ຈາຍກຳລັງ ອ້ອມສອນຫມາກແຕງ. ວິຊາການທະຫານ ທີ່ຂ້າພະ
ເຈົ້ານຳມາສິດສອນເຝິກແອບໃຫ້ ເປັນປະໂຫຍດຕໍ່ພວກເຂົາແລ້ວ.
ຕອນທ່ຽງຄືນ ເດັກນ້ອຍນິຄົມຈຳນວນເຄິ່ງຫນຶ່ງ ໄປນອນຫມູບຢູ່
ແຄມສວນຫມາກແຕງ ຫລັງຈາກສິ່ງຫນ່ວຍກວດກາ ແລະສ່ອງແສງ
ອອກໄປແລ້ວ, ພໍແຕ່ພວກຜູ້ເກົ້າສະແດງວ່າຮູ້ເມື່ອຄືງແລ້ວເທົ່ານັ້ນ
ພວກເດັກນ້ອຍກໍແລ່ນໂຫ້ທັ້ງຮ້ອງໂຮບຸກເຂົ້າໄປໂລດ. ພວກພໍ
ເກົ້າຍາມທັ້ງຮ້ອງທັ້ງກອຍແລ່ນເຂົ້າປ່າ ຕົກຄະມ່າຫລາຍເລີຍລົ້ມກົ້ມ
ປົ້ນໄວ້ໃນຕຸບ.

ເດັກນ້ອຍຫມູ່ຫນຶ່ງສົນລະວົນນຳແຕ່ການກອບໂກຍຜົນສຳເລັດ
ຂອງໃຊຊະນະ. ພວກເຂົາປົດຫມາກໂມຫມາກແຕງໂຍນກັ້ງມັນລົ້ງ
ຕາມຄຸ້ຍສອນຈົນຮອດຕີນທ່ຽ ສ່ວນອີກພວກຫນຶ່ງຈັດການແກ້
ແຄ້ນໃຫ້ສົມໃຈຄືຈັດການເຜົາເຮືອນຕຸບຫລັງໃຫຍ່ເສຍເລີຍ.

ພໍ່ເກົ້າຍາມຜູ້ຫນຶ່ງ ແລ່ນມາຮອດນິຄົມປຸກຂ້າພະເຈົ້າລຸກ ພວກ
ເຮົາພ້າວກັບຄືນໄປຍັງສະຫນາມຮົບທັນທີ.

ແປວໄຟໂຮງຮຸ່ງພຸ່ງແສງຢູ່ເທິງຈອມໂພນເບິ່ງພໍປານວ່າ ຫມົດ
ບ້ານກຳລັງຕົກຢູ່ກາງກອງໄຟໃຫຍ່. ເມື່ອພວກເຮົາໄປຮອດທ່ຽນັ້ນ
ມີສຽງປືນດັງວ່ອນໆຫລາຍບາດຢູ່ ຂ້າພະເຈົ້າແນມເຫັນພວກເດັກ
ນ້ອຍນອນເຫັບເປັນລະບຽບກະຈາຍ ຢູ່ຕາມພຸ່ມເຄືອຫມາກໂມ,
ບາງເວລາພວກເດັກນ້ອຍຫນ່ວຍຕໍ່ສູ້ເຫລົ່ານີ້ ກໍລຸກຂຶ້ນພົບພັບແລ່ນ
ມຸ່ງຫນ້າເຂົ້າໄປຫາຕຸບທີ່ກຳລັງໄຫມ້ທາງດ້ານຂວາມື ສຽງມີເຕຍກົນ
ສັ່ງການດັງມາວ່າ:

- ບໍ່ຕ້ອງຫຍັບເຂົ້າໄປອີກ, ອອກດ້ານຂ້າງເລີຍ.

- ແລ້ວແມ່ນໃຜຊັ້ນຍິງປືນຫັ້ນ? ຂ້າພະເຈົ້າຖາມພໍ່ເກົ້າ.

- ໂອ້ຍ! ໃຜຊິຮູ້? ບໍ່ມີໃຜຢູ່ຫັ້ນຈັກຄົນແລ້ວ. ບາງທີອາດຊິແມ່ນຜູ້ໃດຜູ້ຫນຶ່ງລືມປືນໄວ້ໃນຫັ້ນ ແລ້ວມັນແຕກເອງຕິ.

ມາຮອດຫນີ້ກໍເປັນອັນວ່າທຸກຢ່າງອະວະສານແລ້ວ ໃນພິບຕາດຽວເທົ່ານັ້ນ ພວກເດັກນ້ອຍຫາຍວັບໄປພໍປານວ່າພວກເຂົາຫນີເຂົ້າໃນໃຕ້ພື້ນດິນຫມົດ. ພໍ່ເກົ້າຫາຍໃຈແຮງໆບາດຫນຶ່ງ ແລ້ວກໍຍ່າງເມື່ອເຮືອນລາວ ຂ້າພະເຈົ້າກັບມາຍັງນິຄົມ. ຄວາມງຽບສະຫງັດພໍປານພະຍາມັດຈຸລາດອອກເລາະຄອບງຳທົ່ວຫໍພັກ. ພວກເຂົາບໍ່ພຽງແຕ່ທຳທ່ານອນຫລັບເທົ່ານັ້ນ ແຕ່ຍັງພິຕິກັນອີກ. ຂ້າພະເຈົ້າບໍ່ເຄີຍໄດ້ຍິນສຽງກົນແຮງແບບນີ້ມາກ່ອນເລີຍໃນຊີວິດ, ຂ້າພະເຈົ້າເວົ້າຂຶ້ນຄ່ອຍໆວ່າ:

- ເຊົາເຮັດຕະຫລົກແບບນີ້ເທາະ, ລຸກຂຶ້ນໄວ!

ສຽງກົນມິດໄປ ແຕ່ຫມິດທຸກຄົນ ຍັງນອນນິດອົ້ມສົ້ມຕໍ່ໄປ.

- ລຸກຂຶ້ນ, ໄດ້ຍິນບໍ່?

ຫົວຫຍ້ຽງຫຍອງໂງ້ຂຶ້ນຈາກຫມອນ, ມີເຕຍກົນແນມເບິ່ງຄືກັບວ່າມັນບໍ່ຈັ່ຂ້າພະເຈົ້າ.

- ມີ່ຫຍັງຊັ້ນຫວະ?

ແຕ່ກາຣາບານິບ ອິດບໍ່ໄຫວ ເລີຍສາລະພາບແບບເບິກບານຂຶ້ນວ່າ:

- ເຊົາເທາະ ມີເຕຍກົນ, ຊິໄດ້ຫຍັງດີຂຶ້ນເກາະ!

ຫມິດທຸກຄົນ ລຸກຂຶ້ນມານັ່ງອ້ອມຍາດກັນເລົ່າພັນລະນາເຖິງຄວາມຜິດຫວັງຄ່ຳຄືນແຫ່ງໄຊຊະນະໃນຄັ້ງນີ້ຢ່າງລະອຽດ. ທັນ

ໃດນັ້ນ ຕາຣາເນັດ ກໍໂດດດົ່ງຂຶ້ນພໍປານນີໃຜກອກນ້ຳຮ້ອນໃສ່ມັນ.

- ເລ້ອປືນເດ້ລະ, ປືນຢູ່ພຸ້ນບ່ ?

- ມັນໄຫມ້ຫມົດແລ້ວລະ.

- ດ້ານໄມ້ມັນໄຫມ້ແຕ່ສ່ວນອື່ນໆຍັງດີຢູ່.

ແລ້ວມັນກໍໂດດແລ້ນອອກຈາກຫ້ອງໄປ.

ຂ້າພະເຈົ້າເວົ້າຂຶ້ນວ່າ:

- ທ້າງຫນົດນີ້ ອາດຊິເປັນຕາຫົວຢູ່ດອກ ແຕ່ເຖິງຢ່າງໃດ ມັນ ກໍແມ່ນການໂຈລະກຳປັ້ນສະດົມແບບທຳມະດາໆ ຢ່າງຫນຶ່ງຫັ້ນລະ. ກູບໍ່ສາມາດເຫັນດີເຫັນງາມນຳພວກສູອີກຕໍ່ໄປແລ້ວ ຖ້າພວກສູ ອອນຊອນຢາກໄຕ່ຕາມເສັ້ນທາງນີ້ ກໍຕາມໃຈສູ. ແຕ່ວ່າຂໍຖາມແດ່ ມັນແມ່ນແບບແຜນດຳລົງຊີວິດບໍ? ທ້າງກາງເວັນທ້າງກາງຄືນ ບໍ່ມີໃຜ ໄດ້ພັກຜ່ອນຢູ່ຢ່າງສະຫງົບບໍ່ວ່າຢູ່ໃນນິຄົມນີ້ກໍຄືຫນົດຂົງເຂດນີ້.

ກາຣາບານີ ຈັບແຂນຂ້າພະເຈົ້າໄວ້.

- ເຊົາແລ້ວ, ພວກເຮົາເອງກໍເຫັນວ່າສົມຄວນແລ້ວແມ່ນບໍ ຫມູ?

ພວກເດັກນ້ອຍຕອບເປັນສຽງດຽວກັນວ່າເຫັນດີ.

- ແຕ່ທ້າງຫນົດນີ້ກໍເປັນຄຳເວົ້າລ້ວງ, ຂ້າພະເຈົ້າຮ້ອງຕໍ່, - ຂໍ ເຕືອນໄວ້ກ່ອນວ່າກ້າເລ່ືອງປັ້ນສະດົມທຳນອງນີ້ ເກີດຂຶ້ນອີກກູຊິໄລ່ ຜູ້ໃດຜູ້ຫນຶ່ງອອກຈາກນິຄົມໂລດ, ຈື່ໃສ່ຫົວສະຫມອງສູໄວ້ເພາະ ວ່າກູຊິບໍ່ເວົ້າຊ້ຳສອງ!

ໃນມື້ຕໍ່ມາ ກໍມີກອງນທລາຍເຫລ້ັ້ມມາຂົນຫມາກແຕງຫມາກ ໂມທີ່ເຫລືອຢູ່ໃນສວນຮ້າງອັນງົບເຫງົ້າແລ້ວກໍກັບເມືອ.

ຢູ່ເທິງໂຕະຂອງຂ້າພະເຈົ້າ ມີປື້ນຍາວແລະເສດອາໄຫລ່ຂອງປື້ນ ເຫລືອຈາກໄຟໄຫມ້ວາງຢູ່.

ບົດທີ ๔๔

ການຕັດຂາດ

ພວກເດັກນ້ອຍບໍ່ຮັກສາຄຳສັນຍາຂອງພວກເຂົາເລີຍ. ບໍ່ວ່າ ການຮາບານິບ ມີເຕຍກິນແລະສະມາຊິກຄົນອື່ນໆໃນກຸ່ມນີ້ ບໍ່ຍອມຢຸຕິ ການກໍ່ກວນຮາວີໄຮ່ຫມາກແຕງ ທັງສືບຕໍ່ລົງໄປກວາດຄົ້ນລັກຫລອຍ ເຕົ່ອງໃນຫ້ອງໃຕ້ດິນ ແລະສາງມ້ຽນຂອງກິນຂອງຊາວບ້ານໃກ້ຄຽງຄື ເກົ່າ. ໃນທີ່ສຸດພວກເຂົາກໍລົງມືວາງແຜນດຳເນີນການອັນຫນຶ່ງສັບ ສົນທີ່ສຸດ ເຊິ່ງໃນຂັ້ນຕໍ່ມາໄດ້ກໍ່ໃຫ້ເກີດຜົນກະທົບຫລາຍແນວ ບາງ ຢ່າງເປັນຕາເສົ້າໃຈ.

ຄືນຫນຶ່ງ ພວກເຂົາໄປໃນສວນເຜົ້າຂອງ ລຸກາ ເຊ່ນເຄີຍ ລັກເຜົ້າມາສອງຮົງ ເອົາທັງແມ່ເຜົ້າມານຳ. ພວກເຂົາເອົາຮົງເຜົ້າມາ ໄວ້ໃນນິຄົມຫ້ອຍໄວ້ໃນໂຮງຈ່ຳງແປງເກັບ ເຊິ່ງໃນເວລາຍັງບໍ່ທັນໄຂ ກິດຈະການເທື່ອ. ດ້ວຍຄວາມພໍອົກພໍໃຈສຸດຂີດ ພວກເຂົາໄດ້ ຈັດພາເຂົ້າຊຸມແຊວກັນຢ່າງໃຫຍ່ໂດຍມີເດັກນ້ອຍນິຄົມສ່ວນຫລວງ ຫລາຍເຂົ້າຮ່ວມ. ເຊ້ົາມື້ຕໍ່ມາພວກເຮົາກໍສາມາດຈົດບັນຊີລາຍຊື່ ແຂກທີ່ເຂົ້າຮ່ວມໄດ້ຢ່າງແນ່ນອນ ໃບຫນ້າຂອງພວກເຂົາເບ້ົາໄຄ່ ແລະແຕງເປັນບ່ວງໄປທົ່ວ. ຫນ້ເລຊີນັ້ນ ຈົນຕ້ອງແລ່ນໄປຫາ ເອົາເຕີຣິນາ ກຣີກເຮັບນາ ເພື່ອຂໍຮັບການປິ່ນປົວຈາກ ນາງ.

ເມື່ອກົກເອົ້ນມາຫາຢູ່ຫ້ອງການ ມີເຕຍກົນ ກໍອອກໂຕເປັນຜູ້ຮັບຜິດຊອບໃນເລື່ອງນີ້ທັນທີ, ມັນປະຕິເສດບໍ່ບອກຊື່ຜູ້ຮ່ວມງານ ທັງສະແດງຄວາມປະຫລາດໃຈວ່າ:

-ບໍ່ເຫັນວ່າຊິມີເລື່ອງຫຍັງຫນ້າແຕກຕື່ນເລີຍ! ການທີ່ພວກເຮົາເອົາຮັງເຜິ້ງມານັ້ນ ມັນບໍ່ແມ່ນສຳລັບຕົວພວກເຮົາເອງຈັກຫນ້ອຍ ແຕ່ແມ່ນເພື່ອຫມົດນິຄົມ ຖ້າເຈົ້າເຫັນວ່າການລ້ຽງເຜິ້ງຢູ່ນິຄົມນີ້ເປັນເລື່ອງເປັນໄປບໍ່ໄດ້ ພວກເຮົາກໍຈະເອົາມັນກັບຄືນໄປສົ່ງ.

-ນຶ່ງຊິເອົາຫຍັງໄປສົ່ງອີກ? ສູກົນນ້ຳເຜິ້ງ, ແມ່ເຜິ້ງບິນຫນີຫມົດແລ້ວ.

-ຕາມແຕ່ເຈົ້າວ່າແລ້ວຊັ້ນ, ຂ້ອຍເຫັຍກເຮັດດີທີ່ສຸດຫັ້ນລະ.

-ບໍ່ດອກ, ມີເຕຍກົນເອີ້ຍ, ອັນດີທີ່ສຸດລະ ແມ່ນວ່ານຶ່ງຫັ້ນໄປ...ຫນີຈາກຫນີ້ ປ່ອຍໃຫ້ພວກເຮົາຢູ່ຢ່າງສະຫງົບດີກ່ວາ ນຶ່ງໃຫຍ່ພໍແລ້ວ, ກູກັບນຶ່ງບໍ່ເຄີຍກົກກັນ, ຊັ້ນໄປສາດີກ່ວາ.

-ຂ້ອຍກໍຄຶດແນວນັ້ນຄືກັນ.

ມັນຈຳເປັນທີ່ສຸດທີ່ຕ້ອງແຍກຫມໍອອກໄປໃຫ້ໄວທີ່ສຸດ ເທົ່າທີ່ຈະໄວໄດ້ ຂ້າພະເຈົ້າເຂົ້າໃຈແລ້ວວ່າ ການທີ່ຕົນເອງໄດ້ປ່ອຍໃຫ້ເຫດການລ່ວງເລີຍມາຈົນປານນັ້ນ ເປັນສິ່ງບໍ່ຫນ້າໃຫ້ອະໄພເລີຍ, ມັນກາຍເປັນວ່າຂ້າພະເຈົ້າເບິ່ງຂ້າມ ຄວາມເປື່ອຍເຍື່ອຍເປັນຂັ້ນໆ ຂອງປະຊາຄົມພວກເຮົາ ເຊິ່ງເລີ່ມກໍ່ຕົວເປັນຮູບເປັນຮ່າງມາແຕ່ດົນແລ້ວຫັ້ນນຳ. ບາງທີໃນກະໂຕການລັກຫມາກໂມຫມາກແຕງຫລືການຂະໂມຍຮັງເຜິ້ງນັ້ນອາດບໍ່ມີຫຍັງເສຍຫາຍຮ້າຍແຮງເປັນພິເສດດອກ ແຕ່ການທີ່ພວກເດັກນ້ອຍສຸມຈິດໃຈຕໍ່ສິ່ງເຫລົ່ານີ້, ສະຫລະເວລາ

ທ້າວ ວັນທ້າ ຄືນໃສ່ຕະຫລອດເວລາ ສາລະວິນ ຈຸ່ນ ວາຍ ຢູ່ນໍ ແຕ່ ການ ວາງ ແຜນ ແລະ ເຕັມ ໄປ ດ້ວຍ ຄວາມ ຮູ້ສຶກ ປະທັບ ໃຈ ນັ້ນ ເອງ ທີ່ ຫມາຍ ບອກ ວ່າ ບັດ ນີ້ ການ ຂະ ຫຍາຍ ຕົວ ຂອງ ແນວ ຄິດ ໂຮມ ຫມູ່ ຂອງ ພວກ ເຮົາ ໄດ້ ຢຸດ ຈົ່ງ ຢູ່ ກັບ ບ່ອນ ແລ້ວ ຫມາຍ ຄວາມ ວ່າ ມັນ ແມ່ນ ການ ທໍ້ ຖອຍ ເມື່ອ ຍ ລ້າ ນັ້ນ ເອງ. ບົນ ພື້ນ ຖານ ອັນ ນີ້ ຜູ້ ຕາ ແຫລມ ສ ຫມາດ ແນມ ເຫັນ ລັກ ສະ ນະ ອັນ ບໍ່ ຫນ້າ ອ ນ ຊ ອນ ຢ່າງ ແຈ່ມ ແຈ້ງ ແລ້ວ ເຊັ່ນ ການ ນຸ່ງ ຖື ແບບ ບໍ່ ເປັນ ລະ ບຽບ ຂອງ ພວກ ເດັກ ນ້ອຍ ເອ ງ, ທ່າ ທີ ອັນ ຕ່ໍາ ຫ ຍາ ບ ແບບ ສະ ເພາະ ທີ່ ພວກ ເຂົາ ສະ ແດ ງ ອອກ ຕໍ່ ນິ ຕິ ກໍ ມ ແລະ ການ ອອກ ແຮ ງ ງານ, ການ ຢອກ ລໍ້ ແບບ ລ່ວຍ ລາ ແລະ ເປົ່າ ໂກ ນ, ແລະ ແນວ ຄິດ ຂົ ດ ງ ດ ດ້ ດ ານ ຢ່າ ງ ບໍ່ ອໍ ອ າ ຍ ຂ້າ ພະ ເຈົ້າ ແນ ມ ເຫັ ນ ວ່ າ ແມ່ນ ແຕ່ ຄົນ ເຊັ່ນ ເຄ ຍ ລູ ກ ນ ກັ ບ ຊ າ ໂ ດ ຣ ອ ບ ເຊິ ງ ບໍ່ ເ ຄ ີ ຍ ເ ຂ ້ າ ຮ ່ ວ ມ ໃ ນ ເ ລ ື ່ ອ ງ ໂ ຈ ລ ະ ກ ໍ າ ແ ນ ວ ໃ ດ ແ ນ ວ ຫ ນ ຶ ່ ງ ມ າ ກ ່ ອ ນ ນ ັ ້ ນ ບ ັ ດ ນ ີ ້ ເ ລ ີ ່ ມ ສ ູ ນ ເ ສ ຍ ບ ຸ ກ ຄ ະ ລ ະ ພ າ ບ ອ ັ ນ ແ ຈ ່ ມ ໃ ສ ຂ ອ ງ ພ ວ ກ ເ ຂ ົ າ ໄ ປ . ໂ ຄ ງ ກ ານ ໃ ນ ອ ະ ນ າ ຄ ິ ດ ຂ ອ ງ ພ ວ ກ ເ ຮ ົ າ , ກ ານ ອ ່ ານ ປ ຶ ້ ມ ຕ ຶ ງ ຈ ັ ກ ຫ ົ ວ ຫ ລ ື ບ ັ ນ ຫ າ ກ ານ ເ ມ ື ອ ງ ຕ ່ າ ງ ໆ ພ າ ຍ ໃ ນ ກ ຸ ່ ມ ຮ ວ ມ ຫ ມ ູ ່ ຂ ອ ງ ພ ວ ກ ເ ຂ ົ າ ເ ລ ີ ່ ມ ຕ ິ ກ ອ ັ ບ ຕ ັ ບ ຖ ອ ຍ ໄ ປ ຢ ູ ່ ກ ັ ອ ງ ເ ລ ື ່ ອ ງ ຜ ະ ຈ ິ ນ ໄ ພ ອ ັ ນ ບ ໍ ່ ເ ປ ັ ນ ລ ະ ບ ຽ ບ ລ ະ ບ ຽ ບ ພ ້ ອ ມ ດ ້ ວ ຍ ກ ານ ກ ິ ກ ກ ຽ ງ ຊ ະ ນ ິ ດ ສ ຸ ດ ບ ໍ ່ ເ ປ ັ ນ ທ ີ ່ ມ ັ ນ ກ ໍ ່ ຂ ຶ ້ ນ ນ ັ ້ ນ ນ ໍ າ . ທ ້ າ ວ ມ ິ ດ ນ ີ ້ ສ ິ ່ ງ ຜ ິ ນ ກ ະ ທ ິ ບ ກ ະ ຈ າ ຍ ໃ ສ ່ ອ າ ດ ຊ ີ ວ ິ ດ ຂ ອ ງ ເ ດ ັ ກ ນ ້ ອ ຍ ແ ຕ ່ ລ ະ ຄ ົ ນ ແ ລ ະ ລ າ ມ ໄ ປ ທ ່ ວ ມ ິ ດ ິ ມ ເ ລ ີ ຍ : ມ ີ ອ າ ກ ານ ຕ ື ່ ນ ເ ຕ ັ ້ ນ ຢ ່ າ ງ ຂ າ ດ ລ ະ ບ ຽ ບ , ປ ່ ວ ງ ບ ້ າ ອ າ ລ ະ ວ າ ດ ຂ ຶ ້ ນ ງ ່ າ ຍ ດ າ ຍ ແ ລ ະ ໄ ວ ວ າ ບ ໍ ່ ເ ອ ົ າ ໃ ຈ ໃ ສ ່ ຕ ໍ ່ ກ ານ ນ ຸ ່ ງ ຖ ື ແ ລ ະ ປ ະ ປ ່ ອ ຍ ໃ ຫ ້ ມ ີ ສ ິ ່ ງ ເ ປ ິ ່ ເ ປ ື ້ ອ ນ ລ ີ ້ ລ ່ ອ ນ ຢ ູ ່ ທ ຸ ກ ຈ ອ ກ ແ ຈ .

ຂ້າ ພະ ເຈົ້າ ຂ ຍ ນ ໃ ບ ປ ິ ດ ປ ່ ອ ຍ ໃ ຫ ້ ມ ີ ເ ຕ ຍ ກ ິ ນ , ເ ອ ົ າ ເ ງ ິ ນ ໃ ຫ ້ ມ ັ ນ ຫ

ຣຸບ ສຳລັບໃຊ້ໃນການເດີນທາງ, ມັນບອກວ່າຈະໄປ ໂອແດດຊາ, ຈາກນັ້ນ ກໍອວຍພອນໃຫ້ມັນໄປດີ.

-ຂ້ອຍໄປສັ່ງລາພັກພວກໄດ້ບໍ?

-ໄດ້ແທ້.

ຂ້າພະເຈົ້າບໍ່ຮູ້ວ່າ ການສັ່ງລາຂອງພວກເຂົາເປັນໄປແບບໃດ, ມິເຕຍກິນອອກເດີນທາງກ່ອນຕາເວັນລັບຟ້າ ແລະສະມາຊິກຫມິດນິຄົມກໍອອກໄປສົ່ງມັນ.

ໃນຕອນຄ່ຳ ທຸກສິ່ງທຸກຢ່າງງຽບເຫງົາວັ່ງເວ, ພວກເດັກຮຸ່ນນ້ອຍ ມີທ່າທີຫງອຍເຫງົາໄຮ້ຊີວິດຄືກັບວ່າ ອະໄວຍະວະເຄື່ອນເຫນັງທີ່ແຂງແຮງຂອງພວກເຂົາເປ່ເພໄປແລ້ວ. ການາບານິບນັ່ງຢູ່ເທິງກະໂລ່ງຫນ່ວຍຫນຶ່ງຂວ້ຳຢູ່ໃກ້ໆຫ້ອງມ້ຽນເຄື່ອງ, ມັນບໍ່ເຫນັງບໍ່ຕີງ ນັ່ງໂຕແຂງຢູ່ຈົນຮອດກາງຄືນ.

ເລຊີ ເຂົ້າມາຫາ ຂ້າພະເຈົ້າຢູ່ຫ້ອງການ ແລ້ວເວົ້າວ່າ:

-ຈັ່ງແມ່ນພວກເຮົາຄຶດຮອດ ມິເຕຍກິນ.

ມັນຄອງຖ້າຄຳຕອບຂອງຂ້າພະເຈົ້າຢູ່ເທິງເຕັບ ແຕ່ເມື່ອເຫັນວ່າບໍ່ມີຄຳຕອບມັນກໍອອກໄປ.

ຂ້າພະເຈົ້າເຮັດວຽກຢູ່ຈົນເດິກ, ຮອດເວລາປະມານບ່າຍ ໔ ໂມງ ເມື່ອອອກຈາກຫ້ອງການຂ້າພະເຈົ້າເຫັນມີແສງໄຟລອດອອກມາຈາກຫ້ອງຂ້ໍໃນຄອກມ້າ. ຂ້າພະເຈົ້າປຸກ ອານໂຕນ ແລ້ວຖາມມັນວ່າ:

-ແມ່ນໃຜຢູ່ເທິງຫ້ອງຂ້ໍ?

ມັນຍົກບ່າໄຫລ່ ແບບບໍ່ພໍໃຈບາດຫນຶ່ງ ແລ້ວຈຳໃຈຕອບວ່າ:

- ມິເຕຍກິນ.

- ມັນເຮັດຫຍັງຢູ່ຫັ້ນ?

- ຂ້ອຍຊິຮູ້ໄດ້ແນວໃດ?

ຂ້າພະເຈົ້າຂຶ້ນໄປເທິງຫ້ອງຂໍ. ພວກເຂົາຢູ່ນຳກັນຫລາຍຄົນ ນັ່ງອ້ອມໂຄມໄຟຍາມຂອງຄອກມ້າດວງຫນຶ່ງ: ມີກາຣາບານິບ, ໂວ ໂລຄອບ, ເລຊີ, ປຣີໂກດໂກ, ອິດຊາຈີ. ພວກເຂົາແນມເບິ່ງຂ້າ ພະເຈົ້ານິດໆ. ມິເຕຍກິນ ນັ່ງຢູ່ແຈຫນຶ່ງ ມັນກຳລັງສາລະວິນເຮັດອັນ ໃດອັນຫນຶ່ງຢູ່ໃນຄວາມມືດຂີວນີວ. ຂ້າພະເຈົ້າເກືອບແນມເບິ່ງມັນ ບໍ່ເຫັນ.

- ຫມົດທຸກຄົນໄປຫ້ອງການ.

ຂະນະທີ່ຂ້າພະເຈົ້າໄຂປະຕູຢູ່ນັ້ນ ກາຣາບານິບ ກໍອອກຄຳສັ່ງ ວ່າ:

- ບໍ່ຕ້ອງເຂົ້າໄປຫມົດທຸກຄົນດອກ, ໃຫ້ ມິເຕຍກິນກັບກູເຂົ້າ ໄປກະພໍແລ້ວ.

ຂ້າພະເຈົ້າບໍ່ຄ້ານຫຍັງ.

ພວກເຮົາກ້າວເຂົ້າໄປໃນຫ້ອງ, ກາຣາບານິບນັ່ງເປະລີ້ຕໍ່ ຍາວຢ່າງບໍ່ໄວ້ທ່າໄວ້ທີ. ມິເຕຍກິນຢຸດຢູ່ແຈໃກ້ໆປະຕູ.

- ເປັນຫຍັງມ້ຶງຈຶ່ງກັບຄືນມານີ້ຄືນອີກ?

- ມາເລື່ອງວຽກ.

- ວຽກອັນໃດ?

- ວຽກຂອງພວກເຮົາ.

ກາຣາບານິບ ກົ້ງຕາເບິ່ງຂ້າພະເຈົ້າແບບຮ້ອນແຮງຄາວຫນຶ່ງ ກໍ

ຍຶດໂຕອອກພໍປານເຫລັກໄສ້ເສືອ. ດ້ວຍອາການເຄື່ອນຕົວຄ່ອງໄວ ຄ້າຍຄືວ ມັນກົ້ມຂ້ານໂຕະຍື່ນຫນ້າມາໃກ້ໆກັບໃບຫນ້າຂອງຂ້າພະເຈົ້າ, ແສງຕາພຸ່ງປະກາຍໂຮງຮຸ່ງຈ້ຶງເກືອບຕິດກັບແວ່ນຕາຂອງຂ້າພະເຈົ້າ.

-ເຈົ້າຮູ້ບໍ່ ອານໂຕ ເຊມືອໂນວິດ, ເຈົ້າຮູ້ບໍ່ວ່າຂ້ອຍຊິເວົ້າຫຍັງ? ຂ້ອຍຊິໄປນໍາມີເຕຍກິນ.

-ພວກສູໄປເຮັດຫຍັງຢູ່ຫ້ອງຂີ?

-ບໍ່ມີຫຍັງພິເສດດອກເວົ້າແທ້ກໍດາຍ... ບໍ່ມີເລື່ອງຂ້ອງກ່ຽວກັບນິຄິມເລີຍ. ຂ້ອຍເອງກໍຊິໄປກັບມີເຕຍກິນ ຂ້ອຍກັບເຈົ້າບໍ່ສາມາດເດີນທາງຮ່ວມກັນແລ້ວ ຈັ່ງຊັ້ນ ພວກເຮົາຈ້ຶງຊິຫາທາງໄປ ແບບອື່ນ ເຈົ້າອາດຊິໄດ້ຕ້ອນຮັບ ສະມາຊິກນິຄິມດີກ່ວາພວກເຮົາຢູ່ດອກ.

ຫນ້ານ້ຶຍາມໃດກໍຫລົ້ນບົດບາດຄ້າຍນັກສະແດງ ແລະວາງທ່າທີໂກດແຄ້ນ ໂດຍຫວັງວ່າ ຂ້າພະເຈົ້າອາດຈະສໍານຶກລະອາຍຕໍ່ຄວາມໃຈຫ້ຽມຂອງຕົນ ແລ້ວບໍ່ໄລ່ມີເຕຍກິນໄປ.

ຂ້າພະເຈົ້າແນມເບິ່ງຕາມັນກ້ຽງໆ ແລ້ວກາມຊ້ໍາອີກເທື່ອຫນຶ່ງວ່າ:

-ພວກສູພາກັນໄປເຮັດຫຍັງຢູ່ເທິງພຸ້ນ?

ກາຣາບານິບ ບໍ່ຕອບຫຍັງ ຫນ້ເສືອດ່ແສງຕາແຝງຄໍາກາມໄປຫາມີເຕຍກິນ.

ຂ້າພະເຈົ້າລຸກອອກຈາກຕັ່ງແລ້ວເວົ້າກັບ ກາຣາບານິບວ່າ:

-ນ້ຶງມີປືນຕິດໂຕແມ່ນບໍ່?

-ບໍ່...ມັນຕອບຢ່າງເດັດດ່ຽວຫນັກແຫນ້ນ.

- ປັ້ນກ໊ຶງສ້ຶງອອກມາເບ໋ຶ.

- ອາມໂຕນ ເຊມືອໂນວ໊ດ ເຈ້ົ້າຊ໊ຶ້ນກ໊ຶງຂ້ອຍຫວະ?

- ປັ້ນກ໊ຶງສ້ຶງມ໊ຶງອອກມາ,

- ເອ້ົ້າ...ເບ໋ຶງເທາະແມ້! - ກາຣາບານິບ ຮ້ອງກັ່ນຂ໊ຶ້ນພ໋ຶ່ປານ ຄົນປ່ວ ແລ້ວກ໊ຶໍປັ້ນກ໊ຶງສ້ຶງຂາສັ້ນ ແລະກ໊ຶງເສ໊ຶ້ອຄຸມເຮັດໃຫ້ຢາເສັ້ນ ແລະເສດເຂ້ົ້າຈ໊ຶ່ດ໋ຶ່ຍາຍຊະລ໊ຶງໃສ່ພ໊ຶ້ນແປ້ນ.

- ເອ໊ົາເຄ໊ຶ່ອງຢູ່ກ໊ຶງມ໊ຶງອອກມາ.

ມ໊ຶເຕຍກ໊ຶນ ຄ໋ຶໍາລ໊ຶງໄປໃນກ໊ຶງສ້ຶງມັນເອງແບບເງ໊ຶງະໆ ດ໊ຶງກ໊ຶງຜ້າ ນ້ອຍໆອັນຫນ໊ຶ່ງອອກມາ, ພວງກຸນແຈແລະນ໊ຶກຫວ໊ຶດ, ມັນຫ໊ົອແບບ ເຂ໊ຶນໆແລ້ວເວ້ົ້າວ່າ:

- ຫມ໊ຶດທ໊ຶ່ນ໊ຶ້ແລ້ວ.

ຂ້ານ້ພະເຈ້ົ້າຈ໊ຶກມ໊ຶເຂ້ົ້າໄປໃນແອວ໊ຶ້ສ້ຶງຂອງມັນ ແລ້ວດ໊ຶງ໊ຶ້ນສັ້ນກະ ບອກຫນ໊ຶ່ງອອກມາ, ມ໊ຶລູກປ໊ຶ້ນບັນຈຸໄວ້ແລ້ວ ມ໊ຶ ລູກ.

- ປ໊ຶ້ນຂອງໃຜ?

- ຂອງຂ້ອຍເອງ, - ກາຣາບານິບເວ້ົ້າ.

- ແລ້ວເປັນຫຍັງມ໊ຶງຈ໊ຶ່ຕ໋ຶ່ອະລະວ່າບ໋ຶ່ມ໊ຶ່ຫຍັງ? ແລ້ວກະພວກ ສູ...ເອ໊ົາລະບັດນ໊ຶ້ຊ໊ຶ່ໄປຕາຍທ໊ຶ່ງໃດຫາລະເຊ໊ຶ່ນ... ໄປດ໋ຶ່ງອນ໊ຶ້ໂລດ ແລ້ວກ໊ຶໍຢ່າມາໃຫ້ເຫັນຫນ້າອ໊ຶກຈັກເ໋ຶ່ທ໊ຶ່ອ! ເຂ້ົ້າໃຈ໋ຶ?

ຂ້ານ້ພະເຈ້ົ້ານ໋ຶ່ງລ໊ຶງຄ໊ຶນ ເ໋ຶ່ອຂຽນໃບ໋ຶ່ດ໋ຶ່ປ່ອຍໃຫ້ມັນ ເ໋ຶ່ອຮັບ ເອ໊ົາຫນ໋ຶ່ງສ໊ຶ່ໄປຢ່າງ໋ຶ່ດໆ ແລ້ວມັນກ໊ຶໍເສ໊ຶ່ອກແສງຕາເຍາະເຍ໊ຶ້ຍມາໃສ່ ເງ໊ຶນໃບ໋ຶ້ຫ້ານ໋ຶ່ງ ທ໊ຶ່ຂ້ານ້ພະເຈ້ົ້າເ໋ຶ່ດ໋ຶ່ໃຫ້ ແລ້ວເວ້ົ້າວ່າ:

- ພວກເຮົ້ານ໋ຶ່ບ໋ຶ່ຕ້ອງການດອກ, ໄປລະ.

ມັນເດ່ມາໃຫ້ຂ້າພະເຈົ້າຢ່າງເຂິເຂີນ ແລ້ວບີບນ້ອມືຂ້າພະເຈົ້າຈົນເຈັບຄ້າຍກັບວ່າຢາກເວົ້າອັນໃດອັນຫນຶ່ງ ແລ້ວກໍປັບແປບອອກປະຕູພາໂຕລັບຫາຍໄປທ່າມກາງຄວາມມືດມິດຂອງລາຕີການ. ນິເຕຍກິນ ບໍ່ເດ່ມາຈັບອຳລາ ແລະບໍ່ມີຄຳສັ່ງລາພໍຄວາມ, ຈັບຊາຍເສື້ອມາຕິດກະດຸມຢ່າງສະຫງ່າ, ດ້ວຍຝີຕີນຄ່ອຍເບົາແບບຂີ້ກະໂຫຍ ມັນກໍຕິດຕາມ ກາຣາບານີບອອກໄປ.

ຂ້າພະເຈົ້າອອກມາ ເກີຍຊານ, ທາງເບ້ອງລຸ່ມພວກເດັກນ້ອຍມາຫຸ້ມຈຸ້ມກັນຢູ່ເປັນຫມູ່. ເລຊີແລ່ນນຳກົ້ນຕິດຕາມຄົນທ້ງສອງໄປແຕ່ ພໍໄປຮອດແຄມປ່າ ກໍກັບຄືນມາ. ອານໂຕນ ຢືນຢູ່ເທ້ງຫ້ວຂັ້ນໃດ ທ້ງຫ້ມເພງຄ່ອຍໆຟ້ງບໍ່ເຂ້ົາໃຈ. ເບຍລູກິນເປັນຜູ້ເວ້ົາຜ່າຄວາມງຽບນິດຂຶ້ນວ່າ:

-ເອ້ີ...ດີແລ້ວລະ...ເຮົານ້ີເຫັນວ່າກ໊ືກຕ້ອງດີແລ້ວ.

-ອ...ອາດຊ໊ີ...ຊ໊ີ ຍຸຕິທຳຢູ່ ..ຕ...ແຕ່ກະເປັນຕາເສຍດາຍຢູ່.- ແອກຊະເນັບເວ້ົາ.

-ສຳລັບໃຜ? -ຂ້າພະເຈົ້າຖາມມັນ.

-ສຳລັບ ເຊມີຍ ກັບ ນິເຕຍກິນຫ້ັນແລ້ວ ..ແລ້ວ ເຈ້ົາເອງເດ້...ເຈ້ົາບໍ່ເສຍໃຈຫວະ?

-ກູຫວະ ໂກນກາ...ກູເສຍໃຈນຳມ໊ືງຫ້ັນນະ.

ເມ່ືອຢ່າງຫັນກັບຄືນໄປຫ້ອງນອນນ້ັນ ຂ້າພະເຈົ້າໄດ້ຍິນ ເບຍລູກິນ ເວ້ົາອ້າງເຫດອ້າງຜົນກັບແອກຊະເນັບວ່າ:

-ມ໊ືງນ້ີຕ້ັງຈ້ົາອ່ີຫລ໊ືຄອກ...ບໍ່ເຂ້ົາໃຈຫຍັງເລີຍ, ມ໊ືງອ່ານປ໊ືມຫລາຍ ແຕ່ບໍ່ຜິດຫຍັງກັບບ່ອງຈຸ່ມແກ.

ຕະຫລອດເວລາສອງມື້ ບໍ່ມີຂ່າວຄາວຈາກຜູ້ອຳລາໄປເລີຍ. ສຳລັບການຣາບານິບນັ້ນ ຂ້າພະເຈົ້າບໍ່ຄິດເປັນຫ່ວງເທົ່າໃດ. ມັນຍັງມີພໍ່ຢູ່ ສະໂຕໂຣເຊວອຍເຢ, ຫລັງຈາກເລາະທ່ອງທ່ຽວຢູ່ໃນເມືອງຈັກອາທິດແລ້ວ ມັນຄົງຈະໄປແວ່ຫາພໍ່ມັນເອງ. ສ່ວນຊາຕາກຳຂອງ ນິເຕຍກິນນັ້ນ ຂ້າພະເຈົ້າບໍ່ຄິດວ່າຈະເປັນແນວອື່ນໄປໄດ້ເລີຍ: ມັນອາດຈະເລາະລຽບໄປມາຢູ່ຈັ່ງຊັ້ນຈັກ ๑ ປີ, ເຂົ້າໄປນອນຢູ່ໃນຄຸກເປັນບາງໂອກາດ, ເມື່ອໃດຫາກຖືກຈັບໃນເລື່ອງຮ້າຍແຮງ. ຈາກນັ້ນ ຈຶ່ງຈະຖືກສົ່ງໄປຢູ່ຄຸກໂທດຫນັກໃນເມືອງອື່ນ, ອີກຈັກ ๕-๗ ປີ ກໍຫມົດແລ້ວ ມັນອາດຈະຕາຍລ້ຽຍອນຄົນມຶດພັກພວກດຽວກັນ. ຫລືຖືກຍິງເປົ້າຍ້ອນໂທດປຸ້ນສະດົມ. ບໍ່ມີເສັ້ນທາງອື່ນສຳລັບມັນ. ມັນອາດແກ່ດຶງເອົາ ການຣາບານິບໄປນຳໄດ້ ເພາະວ່າເຖິງຢ່າງໃດ ຫນໍນີ້ກໍເຄີຍໃຊ້ອາວຸດເຂົ້າປຸ້ນຈີ້ຄົນມາແລ້ວເທື່ອຫນຶ່ງ.

ສອງມື້ຕໍ່ມາ ກໍເລີ່ມມີສຽງຊຸ່ມຊ່ຳກັນຂຶ້ນໃນນິຄົມ.

-ນິຄົນເວົ້າວ່າ ເຊມີຍາ ກັບ ນິເຕຍກິນ ລັດປຸ້ນຄົນຢູ່ຕາມຖະຫນົນໃດ໋. ມື້ວານນີ້ ພວກເຂົາໄດ້ລັດປຸ້ນພໍ່ຄ້າຂາຍຊີ້ນທີ່ມາຈາກ ເຮ ເຊຕິລິບກາ.

-ແມ່ນໃຜເວົ້າ?

-ອີ່ນາຍຂາຍນ້ຳນົມທີ່ມາຫາຄອບຄົວ ອົດຊິບຫ້ນນ່າ ເວົ້ານະ.

ພວກເດັກນ້ອຍເວົ້າກັນຊຸບຊຸ່ມຢູ່ຕາມຂອກແຄແຈຮົ້ວ ເມື່ອ ພວກເຮົາກາຍໄປໃກ້ກໍພາກັນມິດ ພວກນັກຮຽນຮຸ່ນເກົ່າ ມັກຫລີບແສງຕາເວັນຕ່ຳ, ບໍ່ຢາກອ່ານຢາກລຶມຫ້ນໃດຫມົດ, ໃນຕອນຄ່ຳກໍຢູ່

ກັນເປັນຈຸ້ມລະສາມຄົນ, ເວົ້າລົມກັນຄ່ອຍໆແຕ່ພຽງຫນ້ອຍດຽວ.

ເມື່ອຢູ່ຕໍ່ຫນ້າຂ້າພະເຈົ້າ ພວກຄູສອນລະວັງບໍ່ເວົ້າເຖິງພວກທີ່ຈາກໄປພໍຄວາມ ມີແຕ່ ລິດາ ຜູ້ດຽວມາເວົ້າກັບຂ້າພະເຈົ້າເທື່ອຫນຶ່ງວ່າ:

- ແມ່ນເຈົ້າບໍ່ດູຕົນພວກເດັກນ້ອຍຫມູ່ນັ້ນແດ່ຫລະ?

- ເອົາລະ ລິດາ...ມາເວົ້າກັນໃຫ້ເຂົ້າໃຈເນາະ! ຂ້າພະເຈົ້າບອກນາງ, ເຊິ່ນເຈົ້າດູຕົນສິ່ງສານພວກເຂົາໄປຄົນດຽວທ້ອນ ແຕ່ຢ່າໃຫ້ຂ້ອຍໄປດູຕົນນໍາເລີຍ.

- ເອົາລະຄັນວ່າແນວນັ້ນກໍແລ້ວໄປ! ນາງລິດາເວົ້າສຽງໆແດ່.

ຫ້າມື້ຕໍ່ມາ ເມື່ອຂ້າພະເຈົ້າເດີນທາງກັບມາແຕ່ໃນເມືອງດ້ວຍກອງນ້ໍາແກ່ໂດຍບັກແດງເຊົ່າຟົ້ນຊຶບຄືນ ຍ້ອນອາຫານອັນອຸດົມສົມບູນໃນລະດູຮ້ອນ, ມັນພາກອງນຍ່າງເຢາະໆມາຕາມກະຫນິນມຸ່ງຫນ້າສູ່ນິຄົມ ອານໂຕນ ຢູ່ຂ້າງຫນ້ໍາ ຫົວ່ງງອງໄປທາງຂ້າງສະແດງວ່າ ມັນກໍາລັງຄົດຫາອັນໃດອັນຫນ້ໍາຢູ່. ຍ້ອນລ້ໍາເຄີຍກັບກະຫນິນສາຍແປນເປົ່າເສັ້ນນີ້ມາພໍແຮງແລ້ວ ພວກເຮົາຈ້ໍາບໍ່ຄອງວ່າຈະພົບພານສິ່ງໃດສິ່ງຫນ້ໍາທີ່ຫນ້າສົນໃຈ.

ໃນທັນໃດນັ້ນ ອານໂຕນ ກໍເວົ້າຂຶ້ນວ່າ:

- ເບິ່ງພຸ້ນແມ້! ບໍ່ແມ່ນພວກເຂົາຫລະທັ້ນ? ອ່າແມ່ນແລ້ວເຊນີຍັງກັບ ມີເຕຍກົນແທ້ໆລະ.

ເງົາຮ່າງຄົນທັງສອງ ປາກົດເປັນຮູບຈະແຈ້ງຂຶ້ນບົນກະ
ຫນົນ.

ຕ້ອງແມ່ນຜູ້ມີສາຍຕາແຫລມຄົມຄື ອານໂຕນ ພີ້ແລ້ວຈົ່ງສາມາດ
ໃຈ້ແຍກໄດ້ວ່າແມ່ນມິເຕຍກົນກັບສ່ຽວເກືຂອງມັນ. ມ້າບັກແດງ
ເລ່ງຝີຕີນພາພວກເຮົາຫຍັບເຂົ້າໄປພົບກັບພວກເຂົາ ຢ່າງວ່ອງໄວ
ອານໂຕນ ເສືອດແສງຕາເບິ່ງຊົບປົ້ນສັ້ນຂອງຂ້າພະເຈົ້າດ້ວຍຄວາມ
ກັງວົນໃຈ.

-ເອົາໃສ່ກົງເສື້ອດີກ່ວາ ມັນຈົ່ງມ໋ືແດ່.

-ມ໋ືງເວົ້າໂລເລ.

-ຊັ້ນກໍຕາມໃຈຂອງເຈົ້າ.

ອານໂຕນ ດຶງເຊືອກບັງຫງນມ້າໃຫ້ຢຸດ.

-ດີໃຈແທ້ໆທີ່ໄດ້ພົ້ກັບພວກເຈົ້າ! ເຊມ໋ຍົງເວົ້າຂຶ້ນ, -ມ໋ັນ
ຂ້ອຍໂລດບໍ່ໄດ້ສັ່ງໄດ້ລາຢ່າງຄັກແນ່.

ມິເຕຍກົນນັ້ນ ຍົ້ມແບບໃຈດີຕາມເຄີຍຂອງມັນ.

-ພວກສູມາເຮັດຫຍັງຢູ່ຫນີ້?

-ພວກເຮົາຢາກພົບກັບເຈົ້າ, ໃນເມ໋ືອເຈົ້າບອກວ່າບໍ່ໃຫ້ກັບໄປ
ຢງບນ໋ິຄົມອົກພວກເຮົາກໍບໍ່ໄປ.

-ແລ້ວມ໋ືງເປັນຫຍັງບໍ່ໄປ ໂອແດດຊາລະ? ຂ້າພະເຈົ້າຖາມ ມິ
ເຕຍກົນ.

-ພວກເຮົາຊ໋ືຢູ່ຫນີ້ກ່ອນ ຈັກຫນ່ອຍ, ຮອດລະດູຫນາວຈົ່ງຊ໋ື
ໄປ ໂອແດດຊາ.

-ມ໋ືງຊ໋ືອົກເຮັດວຽກອົກຫວະ?

- ຊິເບິ່ງກ່ອນວ່າສະພາບເປັນແນວໃດ, ມີເຕຍກິນຕອບ, ພວກເຮົາບໍ່ຄຸງດໃຫ້ເຈົ້າດອກອານໂຕນ ເຊມືອໂນວິດເອີ້ຍ, ແຕ່ລະຄົນມີທາງຊີວິດຂອງໃຜມັນເນາະ.

ເຊມີຍິງນັ້ນ ແຈ່ມໃສເບີກບານຢ່າງເຫັນໄດ້ຄັກ.

- ນ໊ງຊິຢູ່ກັບ ມີເຕຍກິນຫວະ?

- ຂ້ອຍຍັງບໍ່ຮູ້ເທື່ອ, ຂ້ອຍຊວນໃຫ້ມັນເມືອຫາພໍ່ນໍາກັນພໍແຮງ ແຕ່ມັນບໍ່ຍອມຟັງທ່າດຽວ.

- ພໍ່ມັນເປັນມູຊິກ ປານວ່າຂ້ອຍບໍ່ຮູ້ແດ່ວ່າ ແມ່ນຫຍັງ?

ພວກເຂົາຍ່າງນໍາກວຽນຂ້າພະເຈົ້າມາຮອດທາງໂຄ້ງເຂົ້ານິຄົມ.

- ເອົາລະ...ບັດນີ້ຊິອໍາລາພາຈາກກ່ອນ, ຄຶດຮອດພວກເຮົາແດ່ເດີ, ເຊມີຍິງເວົ້າ. ຂໍກອດອໍາລາແດ່.

ມເຕຍກິນຫວອຂນແຮງໆ.

- ນ໊ງຫັ້ນໃຈອ່ອນໂພດ ເຊມີຍິງເອ້ີຍ, ໂຕເຮັດຫຍັງບໍ່ໄດ້ດອກແບບນີ້ນະ.

- ແລ້ວໂຕຫັ້ນເດ້, ໂຕດີກ່ວາເຮົາຫວະ? ເຊມີຍິງຕອບໂຕ້ໃນທັນໃດ.

ສຽງຫົວພວກເຂົາປະສານກັນດ້ງສະທ້ານພ້ງໄພໍ ຈະເຮັດໃຫ້ຫມູ່ນົກກາຕົກໃຈບິນແຕກອົ່ນໄປ, ພວກເຂົາຍົກຫມວກງ໊ບຂ໊ັ້ນແກ່ວ່ງ ແລ້ວລັບຫາຍຈາກສາຍຕາໄປ.

ບົດທີ ๔๓

ยอดแมอปูก

ท้ายละดูใบไม้หล่นปีนั้น เป็นละยะๆงบเหว่าอั่งเอหน้า เบื่อหน่ายท้ำทุอยก่อาละยะใดหมิดในปะหวัดสาดนิคม ฮอๆ พวกเธิา. ภาบอับไล่ ภาธาบานิบ กับมิเตยกินออกจากนิคมภายเป็นเลื่อๆเจ็บปวดแสบใจธุนแธงย่างหน่ำๆ ย้อบอ่ากะโตบุกคืบท้าสอๆที่ก๊กไล่หนีไปนั้น เป็น "พะเอก" ฮอๆนิคม เป็นผู้มีอิดทิพินแธงก่อาหมู่ จั่งฉั้นภาบจากไปฮอๆพวกเขิา จ๋ๆเธ็ดใท้พวกหมู่ที่ยังยู่เสยหลักหน้นบ่ธู้ทิดทาๆไป.

ภาธาบานิบ, มิเตยกิน เป็นนักออกแธงๆานที่ปะเสิดสุด, ภาธาบานิบ นั้นฉ่างสุมจิดสุมใจใส่อ่งกๆานทุกย่างที่มันเธ็ด ด้อยคอามลืมติอ มันท้าเธ็ดท้าม่อน และฉ่างแผ่กะจายคอามเบิกบานอันนั้นออกสู่หมู่พวก. แสๆสะหว่างแต่าพะล้างาน และคอามค่อๆไอฉ่ำนิฉ่ำนานฮอๆมัน บินเฉื่นเอื่นออกจากสอๆฝ่ามือย่างหมิดบ่เป็น, ต่ผู้กงด้านบ่สินใจองกๆานมันธ้อๆคาๆใส่แบบพ่ที่จะเธ็ดใท้แม่นแต่ผู้หน้าด้านที่สุดยากอายไปย้อน. ส่อนมิเตยกิน นั้นก่ฉ่างเอ๊าแก๊บเอ๊าเกยกับมันได้ย่างดีอิเสดที่สุด อาการเคื่อนไหวฮอๆมันเดั่นปะทับตาย้อนคอามนิ่มนอนในร่างสิมกับเป็นอี๊กะโมยที่สุด แต่มันเธ็ดทุกสิ่งทุกย่างด้อยคอามปอดโป่งใจธบร้อยดี และแจ่มใสแบบคืนนิไสดีผู้หน่ำๆ. เอ้าท่อไป, พวกเขิาท้าสอๆ

ປະພຶດຕົນແບບໃຊ້ອາລົມສຳຜັດຫລາຍເທົ່າໆກັບພະລັງງານ ເມື່ອໃດ
ທາກເກີດມີເຫດຈຳເປັນຫລືເລື່ອງກະທົບເກົ້ງນິຄົມ.

ຈັ່ງຊັ້ນການຈາກໄປຂອງພວກເຂົາ ຈຶ່ງເຮັດໃຫ້ສະພາບການດຳ
ລົງຊີວິດຂອງພວກເຮົາເສົ້າຫມອງນ້ອເຂົ້າໃນທັນທີ, ແວກຊະນັບ
ຈົນຕິດຢູ່ກັບປຶ້ມອ່ານແບບບໍ່ເຄີຍເປັນມາກ່ອນ, ການເວົ້າຍອກໃຍ
ຫມູ່ຂອງເບຍລຸກົນ ມີລັກສະນະເກີນເລີຍຢ່າງຈິງຈັງແລະແຝງໄປໃນ
ທາງສຸງດເຍ້ຍຫລາຍກ່ວາ, ສ່ວນພວກເດັກນ້ອຍເຊັ່ນໂວໂລດອບ,
ປຣີໂກດໂກ ແລະອິດຊາຈີນັ້ນ ກໍວາງຊິງເຄັ່ງຂຶມສຸພາບແບບໂພດ
ເຫລືອ. ພວກອ່າວນ້ອຍເຫງົ້າງໆງບຫລິບລີ້ຢູ່ຕາມຈອກແຈ, ນິຄົມ
ທ້ງຫມົດກັບກາຍເປັນສັງຄົມຜູ້ໃຫຍ່ໃນພິບຕາດງວ. ໃນຕອນແລງບໍ່
ມັກມີການເຕົ້າໂຮມກັນແບບເບີກບານອີກແລ້ວ ແຕ່ລະຄົນປາກົດວ່າມີ
ວຽກອັນໃດອັນຫນຶ່ງເຮັດຢູ່ສະເຫມີ. ຄົງມີແຕ່ ຊາໂດຣອບຄົນດຽວ
ເທົ່ານັ້ນ ທີ່ບໍ່ສູນເສຍສຸຂາລົມຂອງມັນໄປ ແລ້ວກໍບໍ່ເຊື່ອງອຳຮອຍ
ຍົ້ມເຈົ້າຊູ້ເຕັມໄປດ້ວຍຄວາມຈິງໃຈຕໍ່ຫມູ່ເພື່ອນ ແຕ່ບໍ່ມີໃຜສົນໃຈ
ຮັບເອົາຄວາມມີຊີວິດຊີວາອັນນ້ີຂອງມັນ ຈັ່ງຊັ້ນມັນກໍໄດ້ແຕ່ຍົ້ມຄົນ
ດຽວຢູ່ແຈຫນຶ່ງໃນຂະນະທີ່ນັ່ງອ່ານປຶ້ມຈັກຫົວ ຫລືສົນລະວົນນຳ
ແບບຢ່າງເຄື່ອງຈັກອາຍນ້ຳທີ່ຫມໍລົງມືມາແຕ່ລະດູບານໃຫມ່.

ການປູກຝັ່ງທີ່ໃຫ້ຜົນດ້ານເລັກນ້ອຍກໍເປັນສາເຫດຫນຶ່ງ
ກັນ ທີ່ເຮັດໃຫ້ພວກເຮົາທໍ້ຫອຍແບບນ້ີການົນາ ອີວາໂນວິດ ບໍ່ເປັນ
ນັກກະເສດທ່ີດີເລີຍ, ລາວມີຄວາມຮູ້ກ່ຽວກັບການບັບປຸງດິນ ແລະ
ວິທີປູກຫວ່ານພ້ືໆປາໆເທົ່ານັ້ນ, ນອກນ້ີດິນທ່ີພວກເຮົາໄດ້ຮັບຕໍ່
ມາຈາກຊາວ້ານນັ້ນຍັງແມ່ນດິນຈືດ ແລະມີຫຍ້າຮ້າຍງໍ້ຂຶ້ນເຕັມ

ໄປຫມົດ. ຍ້ອນແນວນີ້ແລ້ວ ເຖິງວ່າພວກເຮົາໄດ້ອອກເຫື່ອເທ ແຮງໃສ່ຕະຫລອດລະດູຮ້ອນແລະລະດູໃບໄມ້ຫລົ່ນກໍຕາມ ຕິວເລກ ຜົນເກັບກ່ຽວຂອງພວກເຮົາກໍຍັງເປັນຫນ້າເວດທະນາຢູ່. ເຂົ້າປະ ເສແນວປູກລະດູໃບໄມ້ຫລົ່ນນັ້ນ ຄ້າຍຄືພວງຫຍ້າຂວາກຫລາຍ ກວ່າຮວງເຂົ້າ, ຮວງເຂົ້າແນວປູກລະດູບານໃຫມ່ ທັງລືບ ແລະບາງ ກະຮິ ສ່ວນມັນຜະລັ່ງກັບຫົວຜັກກາດຂາວນັ້ນ ຍິ່ງເປັນຕາຫນ້າ ສົມເພດຫລາຍກ່ວານີ້ອີກ.

ຄວາມຮູ້ສຶກທໍ້ຖອຍຫມົດຫວັງປະເພດດຽວກັນນີ້ ຍັງຄອບງໍາ ແຜ່ລາມໄປຮອດກຸ່ມຄູສອນ.

ບາງທີອາດແມ່ນຍ້ອນວ່າພວກເຮົາພາກັນເມື່ອຍຊຶ່ງກໍເປັນໄດ້. ນັບຕັ້ງແຕ່ເຖົ້າໄຂ ນິຄົມເປັນຕົ້ນມາ ພວກເຮົາບໍ່ເຄີຍໄດ້ພັກກັນຈັກຄົນ ແຕ່ພວກຄູສອນບໍ່ໄດ້ຈົ່ມວ່າຮອດເລື່ອງເມື່ອຍອ່ອນເລີຍ. ການໂອ້ ລົມແຕ່ກ່ອນໆວົນຢູ່ແຕ່ນໍາເລື່ອງໄຮ້ຫວັງຂອງພວກເຮົາ, ເລື່ອງທີ່ ວ່າພວກເຮົາສຸມເຫື່ອແຮງໃສ່ວຽກງານຫນຶ່ງ ຊຶ່ງບໍ່ມີທາງວ່າຈະເປັນ ໄປໄດ້ຈັກຫນ້ອຍ ເພື່ອການສຶກສາອົບຮົມເລື່ອງສັງຄົມໃຫ້ເດັກນ້ອຍ "ປະເພດນີ້" ເປັນເລື່ອງເຫລືອວິໄສ ແລະການສະຫລະພະລັງໃຈ ແລະກາຍໃນຄັ້ງນີ້ກໍເປັນເລື່ອງເສຍຫາຍຫລ້ອນໆຢ່າງຫນຶ່ງ.

-ຄວນຊິຢຸດເລີກເລື່ອງຫມູ່ນີ້ໄດ້ແລ້ວ! -ອ໊ອານ ອ໊ອາໂນ໊ວ ເວົ້າຂຶ້ນ. ເບິ່ງແຕ່ ການຮາບານິບ ຫັ້ນເທາະ, ພວກເຮົາເຄີຍພາກ ພູມໃຈໃນໂຕມັນ໋ທໍ່ໃດ. ແລ້ວຍັງຕ້ອງໄດ້ໄລ່ມັນໄປອີກ. ຈັ່ງຊັ້ນຊິມາ ສ້າງຄວາມຫວັງໃຫມ່ແບບສະເພາະເຈາະຈົງໃສ່ຄົນຄື ໂວໂລດອບ, ຫລືແວກຊະເນັ, ອົດຊາຈິ, ຕາຮາເນັດ ກັບຜູ້ອື່ນໆອີກໄດ້ແນວ

ໃດ? ສົມຄວນຊົມເຍີ່ດຫນັ້ນກໍ່ຕ້ງນິຄົມໄວ້ ເພື່ອຄົນຄື ເບຍລູກົນ ຜູ້ດຸງອຫວະ?

ແມ່ນແຕ່ ເອົກາເຕີຣິນາ ກຣີກໍ່ເຮັບນາເອງ ກໍ່ທໍ່ລະຍົດຕໍ່ສຸຂະ ທັດນິຍົມຂອງພວກເຮົາຄືກັນ, ແຕ່ກ່ອນຍ້ອນສຸຂະທັດອັນນີ້ ນາງ ໄດ້ກາຍເປັນມືຂວາ ແລະມິດສະຫາຍຂອງຂ້າພະເຈົ້າຄົນຫນຶ່ງ. ບັດ ນີ້ນາງຢູ່ຫ້ວຄ້ວເຂົ້າກັນດ້ວຍຄວາມພະຍາຍາມສຸດຂີດ ເພື່ອຮົ່ນຕອງ ຢ່ງລະມັດລະວັງ ຈາກນັ້ນ ຈຶ່ງສໍາແດງຜົນແຫ່ງການຄຶດຮົ່ນຕອງ ອອກມາໃນແບບແປກປະຫລາດທີ່ຂ້າພະເຈົ້າບໍ່ຄາດຝັນມາກ່ອນວ່າ :

- ຂ້ອຍຮູ້ສຶກດຸງອນີ້ເອງວ່າບາງທີພວກເຮົາໄດ້ເຮັດຜິດຢ່ງໃຫຍ່ ຫລວງອັນຫນຶ່ງແລ້ວ. ບໍ່ມີແນວຄິດຮວມຫມູ່ຢູ່ໃນນິຄົມນີ້ເລີຍ... ມັນບໍ່ມີໂຕມີຕົນດອກ. ແລ້ວພວກເຮົາຊໍ້າພາກັນເວົ້າຮອດແຕ່ການ ຢູ່ໂຮມຫມູ່. ອັນນີ້ມັນເປັນຍ້ອນວ່າພວກເຮົາປ່ອຍໃຫ້ຄວາມຝັນມາ ກ່ອນຈິດໃຈພວກເຮົາໄວ້ຊຶ່ງນັ້ນເອງ.

- ຂໍໂທດເທາະ, - ຂ້າພະເຈົ້າເວົ້າຂັດນາງຂຶ້ນທັນທີ. - ເຈົ້າ ເວົ້າວ່າພວກເຮົາບໍ່ໄດ້ຢູ່ກັນແບບໂຮມຫມູ່ວ່າຕີ? ແລ້ວເດັກນ້ອຍ ຜ ຄົນນັ້ນເດ້ ເຈົ້າເອົາເຂົາໄປກົ້ມໄວ້ໃສ? ວຽກງານ, ການດໍາ ລົງຊີວິດຮ່ວມກັນ, ໃນຕີຈິດມິດຕະພາບຂອງພວກເຂົາຫັ້ນເດ້?

- ແລ້ວເຈົ້າຮູ້ບໍ່ວ່າທັງຫມົດເຫລົ່ານີ້ແມ່ນຫຍັງ? ມັນເປັນພຽງ ການຫລິ້ນມ່ວນອັນຫນ້າສົນໃຈຕອນຫນຶ່ງເທົ່ານັ້ນເອງ ພໍຊິເວົ້າໄດ້ ຢູ່ດອກວ່າເປັນການຫລິ້ນແບບສະຫລາດ ພວກເຮົາຫລົງກົນຂອງ ມັນ ພວກເດັກນ້ອຍເອງກໍ່ຄືກັນ ແຕ່ນັ້ນມັນແມ່ນສໍາລັບລະຍະຫນຶ່ງ ຊຶ່ງດອກ. ແລ້ວບັດນີ້ເຈົ້າເຫັນບໍ່ລະວ່າມັນຫນ້າເບື່ອແລ້ວ. ຫມົດ

ທຸກຄົນເປີດຫນ່າຍ, ບໍ່ດົນມັນຊືກໍ້ມ້ຽນຂຶ້ນສາງແລ້ວ ຈາກນັ້ນ ນິ ຄົນນີ້ກໍຈະກາຍເປັນເຮືອນລ້ຽງເດັກນ້ອຍຕິດໄພສັງຄົມແບບທາມະ ດາໆບ່ອນຫນຶ່ງລ້ານໆ ແລະບໍ່ປະສົບຄວາມສຳເລັດເລີຍ.

-ເມື່ອຮູ້ສຶກເບື່ອການຫລົ້ນຢ່າງຫນຶ່ງ ພວກເຮົາກໍຄວນປ່ຽນໄປ ຫລົ້ນແນວໃຫມ່, -ລິດາ ເປຕຣິບນາເວົ້າຂຶ້ນ ເພື່ອປັບແປງບັນ ຍາກາດອັນຫນ້າຫນຸດຫນັດທີ່ກໍ່ຈາກຄຳເວົ້າເຫລົ່ານີ້.

ພວກເຮົາພາກັນຫົວແບບເສົ້າແສບຫົວໃຈ ແຕ່ຂ້າພະເຈົ້າບໍ່ເຄີຍ ຄຶດວ່າຈະຍອມຈຳນົນງ່າຍໆ.

-ເອົາເຕີຣິນາ ກຣິກໍເຣັບນາ ເອ້ີ ອັນທີ່ເຈົ້າເວົ້າອອກມານັ້ນ ມັນແມ່ນການ້ອນວອນຮ້ອງຂໍແບບອ່ອນແອທົ່ວໆໄປຂອງພວກ ບັນຍາຊິນຊຶ່ງດອກ; ຂ້າພະເຈົ້າບອກນາງ, -ບໍ່ສົມຄວນຊິໄປສະ ຫລຸບຜົນໃດໆອອກມາຈາກອາລົມຈິດຂອງເຈົ້າເອງ ມັນເກີດຂຶ້ນຄາວ ຫນຶ່ງແລ້ວ ກໍຈະຈາງຫາຍໄປເອງ ເຈົ້າເອງກໍປາກະຫນາສຸດຂຶດແລ້ວ ເດ ເລື່ອງຢາກຜາບແພ້ ການາບານິບ ກັບ ມິເຕຍກິນ ນະ ແຕ່ ຄວາມຮຽກຮ້ອງດ້ືດັນສຸດຂຶດແບບບໍ່ມີເຫດຜົນ, ຫົວໃຈໂລເລ ແລະ ຄວາມກະສັນຮຸນແຮງຊຸກດັນໄປຫາສຽງຮ້ອງໃຫ້ໂອ່ຍຄາງ ແລະຄວາມ ຫມິດອາໄລອາວອນ, ທັ້ງຫມົດນີ້ເວົ້າແບບໃດກໍເວົ້າ ມັນແມ່ນປັດ ຊະຍາບ້າໆບໍ້ໆຢ່າງຫນຶ່ງເທົ່ານັ້ນ.

ຂ້າພະເຈົ້າເວົ້າແບບນີ້ກໍແມ່ນເວົ້າເພື່ອເຕືອນຕົນເອງນຳ ມັນ ອາດເປັນຄວາມຈິງທີ່ວ່າການຂໍຮ້ອງອ້ອນວອນອ່ອນແອຢ່າງນີ້ແມ່ນ ແບບສະເພາະຂອງບັນຍາຊິນ ບາງເວລາຂ້າພະເຈົ້າເກີດມີຄວາມຄຶດ ຂົມຂື່ນອັນນີ້ຂຶ້ນມາ: ສົມຄວນປະຖິ້ມທຸກຢ່າງແລ້ວ, ພຽງສອງຄົນ

ຄືເບຍລູກົນ ກັບຊາໂດຣອບເທົ່ານັ້ນ ມັນບໍ່ຄຸ້ມຄ່າພໍທີ່ເສຍແຮງລ້ຽງ ຄົນຫນິດທ້າງນິຄົມຊຶ່ງບໍ່ມີປະໂຫຍດຫຍັງນັ້ນດອກ. ຂ້າພະເຈົ້າຄຶດ ອອກແລ້ວວ່າພວກເຮົາມາເກີງຂັ້ນລ່ອຍລາອ່ອນແຮງ ແລະຄວາມສຳ ເລັດກໍເປັນເລື່ອງສຸດວິໄສໄປແລ້ວ.

ແຕ່ຄວາມຊຶນເຄີຍອັນເກົ່າແກ່ ກັບການດຳລົງຊີວິດແບບສະຫລະ ທຸກກຳລັງກາຍແລະຈິດໃຈທັ້ງຫມດເຂົ້າໃສ່ວຽກງານທ່ານກາງຄວາມ ມືດງຽບ ແລະການຄອງຄອຍຍັງຄົງຕິດຢູ່ໃນຈິດໃຈຂ້າພະເຈົ້າຢູ່. ຂ້າ ພະເຈົ້າເຝິກແອບຕົວເອງໃຫ້ມີຄວາມເຂັ້ມແຂງ ແລະເຊື່ອຫມັ້ນໃນ ຕົວເອງ ເມື່ອຢູ່ຕໍ່ຫນ້າພວກເດັກນ້ອຍກັບພວກຄູສອນ, ຂ້າພະເຈົ້າ ເວົ້າວ່າຕັກເຕືອນພວກນີ້ທັນທີ ເມື່ອເຫັນວ່າພວກເຂົາຫນິດ ຫວ້ງທ້ຫ້ອຍ, ພະຍາຍາມຊີ້ສະແດງໃຫ້ພວກເຂົາເຊື່ອວ່າ ຄວາມ ລັບສົນຫຍຸ້ງຍາກທັ້ງຫມດເຫລ່ານີ້ຈະຜ່ານພົ້ນໄປ ແລະໃນບໍ່ດົນ ພວກເຮົາກໍຈະພາກັນລືມມັນໄປເອງ. ຂ້າພະເຈົ້າຮູ້ສຶກເຄົາລົບຄວາມ ເດັດດ່ຽວທໍລະຫົດອົດທົນ ແລະລະບຽບວິໄນອັນເຂັ້ມງວດທີ່ພວກຄູ ສອນໄດ້ພິສູດອອກມາຕະຫລອດເວລາກັນດານເຫລ່ານີ້.

ຍາມໃດພວກເຂົາກໍປະຕິບັດໂມງເວລາຢ່າງຄັກແນ່, ຫ້າວຫັນ ພ້ອມທີ່ຈະເຮັດອັນໃດອັນຫນຶ່ງສະເຫມີ ເມື່ອເກີດເລື່ອງບໍ່ຈິບບໍ່ງາມ ແນວໃດແນວຫນຶ່ງພາຍໃນນິຄົມ, ບໍ່ປະລະຮີດຄອງອັນດີງາມທີ່ເຄີຍ ມີມາ ແຕ່ເລີ່ມຕົ້ນຄືການເຂົ້າປະຈຳການຢ່າງເປັນປົກກະຕິ ນຸ່ງເຄື່ອງ ຮຽບຮ້ອຍເປັນລະບຽບຕາມເຄີຍ.

ນິຄົມກ້າວໄປຂ້າງຫນ້າຢ່າງປາສະຈາກຮອຍຍິ້ມແລະຄວາມເບີກ ບານ ແຕ່ດ້ວຍຈັງຫວະຫນັກແຫນ້ນຈະແຈ້ງຄ້າຍຄືເຄື່ອງຈັກຫນ່ວຍ

ດີ ທີ່ໄດ້ຮັບການປັບປ່ຽນຢ່າງດີແລ້ວ ຂ້າພະເຈົ້າຍັງສັງເກດເຫັນ ຫມາກຜົນອັນດີ ທີ່ເກີດຈາກການລົງໂທດແບບເຂັ້ມງວດຕໍ່ນັກຮຽນ ທັງສອງຄົນຄື ການລັກເລັກຂະໂມຍນ້ອຍຢູ່ໃນບ້ານປະຊາຊົນມີຄ່ຽງບ ໄປເລີຍ, ການງັດແງະຫ້ອງໃຕ້ດິນ ແລະການບຸກໄຮ່ຫມາກແຕ ກໍ ກາຍເປັນເລື່ອງຂອງອະດີດໄປ. ຂ້າພະເຈົ້າທຳທ່າບໍ່ສັງເກດເຫັນວ່າ ຈັນຍາທຳຂອງພວກເດັກນ້ອຍຫລຸດຕ່ຳລົງ ແລະໂດຍສະເພາະແລ້ວ ຂ້າພະເຈົ້າເຮັດບໍ່ເຫັນຈັກຫນ້ອຍວ່າພວກເຂົາເລີ່ມຫັນມາເຄົາລົບລະ ບຽບວິໄນຄືນອີກ ກະທັ້ງຮອດທ່າທີອັນກ້ຽກຕ້ອງຂອງພວກເຂົາຕໍ່ຊາວ ບ້ານ, ຂ້າພະເຈົ້າປ່ອຍໃຫ້ທຸກຢ່າງດຳເນີນໄປເອງ, ກ້າວໄປຫນ້າຄື ກັບທີ່ເປັນມາໃນອະດີດ.

ວຽກງານສຳຄັນຫລາຍອັນສະເຫນີຫນ້າຂຶ້ນມາແລ້ວ. ພວກ ເຮົາລົງມືກໍ່ສ້າງເຮືອນແກ້ວອຸ່ນຫລ້ງຫນຶ່ງຢູ່ນິຄົມໃຫມ່, ຫລັງຈາກ ກຳຈັດເສດເຫລືອຂອງຕຶກເກົ່າໄປແລ້ວ ກໍລົງມືປັບລະດັບຫນ້າດິນ, ຂຸດຮາງຢ່າງ, ພວກເຮົາຝັງຫລັກຮົ້ວແລະກໍ່ປະຕູໂຂງ, ເລ່ງລັດກໍ່ ສ້າງຂີ້ຂ້ານຫ້ວຍ ໂກໂລນາກໃສ່ບ່ອນແຄບກ່ອາຫມູ, ທາງໂຮງຕີ ເຫລັກກໍ້ຂຽວເຂັ້ນເຮັດຕຽງເຫລັກໃຫ້ພວກເດັກນ້ອຍ, ມີການສ້ອມ ແປງເຄື່ອງມືກະສິກຳ ແລະອັນຂຽວເຂັ້ນເຮັດດ່ວນກ່ອາຫມູ່ກໍແມ່ນ ການສ້ອມແປງເຮືອນຕຶກ ຢູ່ນິຄົມໃຫມ່. ຂ້າພະເຈົ້າຕັ້ງກຳນົດວຽກ ງານໃຫ້ພວກເດັກນ້ອຍເຮັດຫລາຍຂຶ້ນໆ ທັງຮຽກຮ້ອງໃຫ້ທັງຫມົດ ຮັກສາໂມງເວລາແລະຄວາມຄັກແນ່ໃນການເຮັດວຽກຢ່າງເຂັ້ມງວດຄື ກັນຫມົດ.

ຂ້າພະເຈົ້າເອງກໍ່ບໍ່ຮູ້ຄືກັນວ່າເປັນຍ້ອນເຫດໃດແທ້ ອາດຈະ

ແມ່ນຍ້ອນສັນຊາດຕະຍານຈາກຈິດສຳນຶກສ່ວນເລິກຂອງນັກສຶກສາ ສາດນັ້ນຫລືທີ່ເຮັດໃຫ້ຂ້າພະເຈົ້າສຸມຈິດໃຈໃສ່ການເຝິກແອບອີງການທະຫານຢ່າງເອົາເປັນເອົາຕາຍ.

ກ່ອນຫນ້ານັ້ນ ຂ້າພະເຈົ້າພາເດັກນ້ອຍແອບກາຍ ແລະການກະກຽມແບບທະຫານ, ຂ້າພະເຈົ້າເອງບໍ່ເຄີຍເປັນຄູສອນກາຍະກຳຜູ້ດີເດັ່ນມາກ່ອນເລີຍ ແຕ່ຍ້ອນຄວາມຈຳເປັນ ພວກເຮົາບໍ່ມີທາງຈະໄດ້ຜູ້ຊ່ຽວຊານໃນດ້ານນີ້ມາຊ່ວຍ ຂ້າພະເຈົ້າເອງເຄີຍຜ່ານໂຮງຮຽນການທະຫານ ຮູ້ແຕ່ເລື່ອງແອບກາຍແບບທະຫານແລະອັນທີ່ກ່ຽວກັບບົດບາດສຳຄັນຂອງຫນ່ວຍກອງໃນເວລາ ເຂົ້າສະຫນາມຮົບເທົ່ານັ້ນ. ໂດຍບໍ່ວິຕິກກັງວົນນຳເລື່ອງເຫດເລື່ອງຜົນ ແລະຫລັກການວິຊາຄູໃດໆ ຂ້າພະເຈົ້າແກ່ດຶງເອົາພວກເດັກນ້ອຍມາເຝິກແອບກໍ່ຮຽນເອົາສິ່ງມີປະໂຫຍດເຫລົ່ານີ້ທັນທີ.

ພວກເດັກນ້ອຍເອງກໍພໍໃຈນຳການເຝິກແອບນີ້ ແຕ່ລະມື້ ຫລັງຈາກເລີກວຽກແລ້ວ ສະມາຊິກນິຄົມທັງຫນົດພາກັນມາເຕົ້າໂຮມຢູ່ເດີ່ນກ້ວາງບ່ອນຫນຶ່ງ ທຳການເຝິກຊ້ອມແອບກາຍຮອດຫນຶ່ງຫລືສອງຊົ່ວໂມງ ຍົ່ງຄວາມຮູ້ຂອງພວກເຮົາຂະຫຍາຍຕົວຂຶ້ນຫລາຍເທົ່າໃດ ສະຫນາມພຶດຕິກຳຂອງພວກເຮົາກໍຍົ່ງກ້ວາງຂວາງອອກເທົ່ານັ້ນ. ຕົກເຖິງລະດູຫນາວ ກັບແກ່ວນັກຮົບກ້າຕາຍຂອງພວກເຮົາກໍເຝິກແອບເຖິງຂັ້ນຕອນສັບສົນແລະຫນ້າສົນໃຈ ເປັນພິເສດຕອນຫນຶ່ງຢູ່ໃນບໍລິເວນທີ່ມີຕຸບກຸ່ງ ຂອງພວກຊາວນາກະຈັດກະຈາຍຢູ່. ໂດຍປະຕິບັດຕາມກົດເກນສິລະປະການໂຈມຕີເປົ້າຫມາຍຫນຶ່ງໆເຊັ່ນ ຕຸບ, ເຮືອນນ້ອຍ, ການໂຈມຕີແບບໃຊ້ມືດກະບີ ແລະສຽງຮ້ອງ

ຫນ້າຕົກໃຈໄດ້ເຮັດໃຫ້ຫົວໃຈອັນອ່ອນສະດຸ້ງຂອງພວກພໍ່ບ້ານ ແມ່ເຮືອນທັງຫລາຍອີກສັ່ນຂ້ວນແຂວນໄປຫມົດ. ເມື່ອໄດ້ຍິນສຽງໂຮ່ຮ້ອງປະຈັນບານຂອງພວກເຮົາ ພວກຊາວບ້ານທີ່ພາກັນຫົດລີ້ຊ່ອນຢູ່ເບື້ອງຫລັງກຳແພງສີຂາວຄືຫົມະ ຟ້າວຕາເຫລືອກຫລຸບອອກມາອັດກຸນແຈໃສ່ໄລສາງອາຫານ ເລົ້າເຂົ້າ ປະຕູຮ້ອຍ່າງຟ້າວຟັ່ງ ແລ້ວກໍຍືນໂຕລົບຕິດບານປະຕູເຮືອນ ສອດສ່ອງແນມນຳອາການເຄື່ອນໄຫວອັນມີລະບຽບສະຫງ່າງາມຂອງພວກເຮົາ ດ້ວຍແສງຕາຫວາດກົວນຳ.

ພວກເດັກນ້ອຍພໍໃຈນຳສະພາບການນີ້ເປັນທີ່ສຸດ ແລະບໍ່ຄິດທາງນິຄົມກໍໄດ້ຮັບແຈກປືນແທ້ໆ ເພາະເພິ່ນຍິນດີຮັບເອົາພວກເຮົາຢູ່ໃນກັນແກວທະຫານປະຊາຊົນໂດຍບໍ່ກັງວົນນຳອະດີດ ອັນສາໂຫດຂອງພວກເຮົາ.

ໃນລະຫວ່າງການເຝິກແອບນີ້ ຂ້າພະເຈົ້າວາງຕົວເປັນຜູ້ເຄັ່ງຄັດຕໍ່ໂມງເວລາ ແລະລະບຽບວິໄນຄືກັບຜູ້ບັນຊາການທີ່ແທ້ຈິງ ເຊິ່ງພວກເດັກນ້ອຍກໍຍອມຮັບຮູ້ມັນຢ່າງສຸດອົກສຸດໃຈ. ນີ້ເອງທີ່ເປັນຈຸດຕັ້ງຕົ້ນຂອງການຫລົ້ນແບບທະຫານຢູ່ພາຍໃນນິຄົມຂອງພວກເຮົາ ເຊິ່ງໃນຂັ້ນຕໍ່ມາ ມັນໄດ້ກາຍເປັນທຸງໄຊປົວສະບັດຢູ່ໃນຊີວິດຂອງພວກເຮົາຕະຫລອດມາ.

ກ່ອນອື່ນຫມົດ ຂ້າພະເຈົ້າໄດ້ສັງເກດເຫັນອົດທິພົນອັນດີຂອງການເຝິກຫັດແບບຂອງທະຫານ. ວາດທ່າຂອງພວກເດັກນ້ອຍມີອັນປ່ຽນໄປແບບຫນ້າມືເປັນຫລັງມືເລີຍ: ວາດຊິງອ້ອງອາດສະຫງ່າຂົ້ນກ່ວາເກົ່າ, ພວກເຂົາບໍ່ນອນຫມູບອາບຟາບໃສ່ໂຕະ ຫລືຍືນ

ເອື່ອຍຝາອີກແລ້ວ, ສາມາດຍືນຊິງໂຕຢ່າງປອດໂປ່ງ ເປັນຕົວຂອງ ຕົວເອງໄດ້ຄົນ, ນັບແຕ່ນັ້ນມາ ຈຶ່ງສາມາດໄຈ້ແຍກໄດ້ງ່າຍໆວ່າໃຜ ເປັນຄົນໃຫມ່ ໃຜເປັນຄົນເກົ່າ. ທ່າຍ່າງຂອງພວກເຂົາ ເບິ່ງຫນັກ ແຫນ້ນນຸ່ມນວນຄ່ອງໄວຂຶ້ນ. ຫົວເບີກສູງ ແລະປະກົມນີໃສນັກເອົາ ມືຈົກກົ້ງສ້ຳແລ້ວ.

ດ້ວຍຄວາມກະຕືລືລົ້ນຕໍ່ລະບຽບການແບບທະຫານນີ້ເອງ ພວກ ເດັກນ້ອຍຈຶ່ງໄດ້ມີຫົວຄິດປະດິດສ້າງຫລາຍອັນຫລາຍແນວ ເກີດ ຈາກຈິນຕະນາລົມອັນອ່ອນນ້ອຍ ທີ່ພວກເຂົາສະອົ້ນສະອອນຕໍ່ຊີວິດ ທະຫານເຮືອແລະທະຫານບົກ. ແມ່ນໃນລະຍະນີ້ເອງ ທີ່ກົດລະບຽບ ບາງອັນປາກົດຂຶ້ນແລະຖືກນຳມາໃຊ້ຢູ່ພາຍໃນນິຄົມເຊັ່ນເວລາຮັບຄຳ ສັ່ງໄປປະຕິບັດກໍໃຊ້ຄຳວ່າ "ຮັບຮູ" ຕິດຕາມດ້ວຍການຍໍແຂນຂຶ້ນມາ ຄຳນັບຢ່າງອົງອາດແບບເຍົາວະຊົນ, ແລະກໍແມ່ນໃນເວລາດຽວກັນ ນີ້ເອງທີ່ແກໄດ້ປາກົດຕົວຂຶ້ນຢູ່ໃນນິຄົມ.

ແຕ່ກ່ອນ ສັນຍານຕ່າງໆແມ່ນສຽງລະຄັງຂອງເສດເຫລືອມາແຕ່ ສະໄຫມນິຄົມເກົ່າ ພວກເຮົາໄດ້ແກມາສອງຫນ່ວຍ ແຕ່ລະມື້ມີເດັກ ນ້ອຍສອງຄົນເດີນທາງໄປໃນເມືອງ ເພື່ອຮຽນເບິ່ງຢ່າງກົ້ກແບບກົ້ກ ແຜນນຳນັກດົນຕີຜູ້ຫນຶ່ງ ຕໍ່ມາ ຈຶ່ງມີການປະດິດແຕ່ງສຽງສັນຍານ ຕ່າງໆສະເພາະແຕ່ລະໂອກາດ ຕະຫລອດເວລາທີ່ພວກເຮົາດຳລົງຊີ ວິດຢູ່ໃນນິຄົມ ພໍເຖົ້າລະດູຫນາວ ພວກເຮົາປົດລະຄັງອອກ ນັບແຕ່ ນັ້ນມາແຕ່ລະເຊົ້າໃດ ນັກເບິ່ງແກຈະອອກມາຢືນຢູ່ເກີຍຊານຕິດໆກັບ ຫ້ອງການຂອງຂ້າພະເຈົ້າ ແລ້ວຫວ່ານສຽງເສາະໃສ້ກ້ວານຂອງແກ ອອກໄປກວາມງຳທົ່ວແຜ່ນດິນນິຄົມ.

ທ່າມກາງຄວາມງຽບສະຫງົບໃນຍາມຄ່ອຍເລງນັ້ນ ທຳນອງເພງ
ຈາກແກ ຍິ່ງກ້ອງຫອງສັ່ນສະເທືອນອາລົມເປັນພິເສດ ມັນປິວວ່ອນ
ລ່ອງລອຍຜ່ານພວກເຮົາ ໄປສູ່ຫນອງນ້ຳສະທ້ອນຂຶ້ນສູງເຫນືອຫລັງ
ຄາເຮືອນໄມ້. ຕາມປ່ອງຢ້ຽມທີ່ໄຂກ້ວາງຂອງຫ້ຳພັກ ສຽງຫອງໃສ
ຂອງໃຜຜູ້ຫນຶ່ງຈະດັງປະສານສອດຂຶ້ນ ຈາກນັ້ນອີກຜູ້ຫນຶ່ງກໍຈະບີບ
ເປຍໂນຕິດຕາມທຳນອງນັ້ນໂລດ.

ເມື່ອທາງຫ້ອງການກະຊວງສຶກສາປະຊາຊົນ ໄດ້ຍົນເລື່ອງເຝິກ
ແອບການທະຫານຂອງພວກເຮົາ ເພີ່ນເລີຍຕັ້ງຊື່ເຍາະເຍີ້ຍໃຫ້ພວກ
ເຮົາວ່າ "ໂຮງຮຽນທະຫານ" ແລະເອີ້ນມາດັ່ງນີ້ຢູ່ດົນເດີບ. ຂ້າພະ
ເຈົ້າບໍ່ເອົາຫົວຊາເລື່ອງນີ້ດອກ ເພາະເຄີຍຜ່ານສິ່ງທີ່ຫນ້າຂົມຂື່ນຮົ້ນ
ຮໍ່ກ່ວານີ້ມາແລ້ວ ສິ່ງເລັກໆນ້ອຍໆແບບນີ້ບໍ່ສາມາດເຮັດໃຫ້ຂ້າພະ
ເຈົ້າຊຸ່ນຂ້ອງຫມອງໃຈພໍຫນ້ອຍ, ນອກນີ້ ຂ້າພະເຈົ້າບໍ່ມີເວລາເອົາ
ໃຈໃສ່ນັ້ນຊື່ໆນີ້ແລ້ວ.

ໃນເດືອນສິງຫາ ຂ້າພະເຈົ້າໄດ້ຫມູ່ນ້ອຍສອງຕົວມາຈາກສະກາ
ນີທິດລອງພັນສັດບ່ອນຫນຶ່ງ. ມັນແມ່ນພັນອ້າກົດສີດໆເລີຍຈ້ຳຊັ້ນ
ມັນຈ໋ອາລະວາດມາຕະຫລອດເວລາ ເດີນທາງມາຍັງນິຄົມ, ພະຍາ
ຍາມຫມົ້ນເຂົ້າທຸກຮູທຸກຮ່ອມໃນກອງນ, ພວກມັນອາລະວາດຂັດ
ຂ້ອງແຮງຈົນ ອານໂຕນໂມໂຫຮ້າຍຂຶ້ນວ່າ:

-ແມ່ນຄຶດວ່າພວກເຮົາບໍ່ຫຍຸ້ງພໍບໍ່ເນາະ ຈ໋ຶ່ງຄຶດເອົາຫມູມາລ້ຽງ
ຕື່ມ...

ພວກເຮົາສິ່ງຫມູນ້ອຍພັນອ້າກົດໄປໄວ້ນິຄົມໃຫມ່ ບ່ອນທີ່ມີ
ພວກເດັກຮຸ່ນນ້ອຍກ່ວາຫມູ່ ຈຳນວນເກີນຄວາມຕ້ອງການຊ້ຳອີກ

ເພື່ອເບິ່ງແຍງເອົາໃຈໃສ່ກຸມ້ອຍສອງໂຕນີ້. ເວລານັ້ນ ນິຄົມໃຫມ່ ມີສະມາຊິກອາໄສຢູ່ ๔๐ ຄົນພ້ອມດ້ວຍຄູສອນຄົນຫນຶ່ງ ຊຶ່ງເປັນ ບຸລຸດປະເພດຂາດສະມັດກະພາບຊຶ່ປະຫລາດຄົນຫນຶ່ງວ່າ ໂຣດິນຊຶກ. ຕຶກໃຫຍ່ເຊິ່ງພວກເຮົາຕັ້ງຊື່ວ່າຕຶກ "ກ" ສ້ອມແຊມແລ້ວຮຽບຮ້ອຍ. ເພິ່ນກະໄວ້ວ່າຈະເອົາເຮັດເປັນໂຮງຊ່າງ ແລະຫ້ອງຮຽນແຕ່ປັດຈຸບັນ ເປັນບ່ອນນອນຊົ່ວຄາວຂອງພວກເດັກນ້ອຍ. ເຮືອນຕຶກຫລັງອື່ນໆ ແລະຊານຫຸງຕົ້ມເຮືອນກໍ້ລ້ອມແປງແລ້ວຄືກັນ ຍັງມີວຽກງານຫລາຍ ຢ່າງເພື່ອລ້ອມແປງຜາສາດສອງຊັ້ນຂະຫນາດມະຫຶມາຫລັງຫນຶ່ງຊຶ່ງ ຄາດວ່າຈະເອົາເຮັດເປັນຫ້ໍພັກນອນ. ແຕ່ລະມື້ມີການຕອກແປ້ນວາງ ຂອບປະຕູ, ໂບກປະທາຍຝາຂອງໂຮງລິດ, ຄອກມ້າແລະເລົ້າເຂົ້າ.

ວຽກງານກະສິກໍາຂອງພວກເຮົາໄດ້ຮັບການຊ່ອຍເຫລືອຢ່າງແຂງ ຂັນ ພວກເຮົາໄດ້ຂໍນັກກະເສດສາດຜູ້ຫນຶ່ງ ຈ້ຳຊັ້ນບໍ່ດິນ ເອດວກ ນິໂກລາຍວິດ ແຊເຣ ກໍ່ມາປາກົດຕົວ ບນີ້ຜືນແຜ່ນນີ້ຂອງນິຄົມ: ເຂົາຜູ້ນີ້ເປັນຄົນເຂົ້າໃຈຍາກສຸດຂີດ ໃນສາຍຕາຂອງເດັກນ້ອຍ ແລ້ວ ພວກເຂົາກໍຄົງບໍ່ເຄີຍເຫັນຄົນແບບນີ້ຢູ່ໃສມາກ່ອນ. ແນ່ນອນແລ້ວ ເດັກນ້ອຍແຕ່ລະຄົນນັ້ນເຂົ້າໃຈເອົາເອງວ່າ ແຊເຣ ນີ້ຕ້ອງແມ່ນຜະ ລິດຜົນຂອງແນວປູກພືເສດທີ່ເລືອກເຟັ້ນມາ ແລະບໍ່ເຄີຍຖືກລະອອງ ຝົນຈາກຟາກຟ້າໂຮຍຮ່ຳຫົດຮວາດແຕ່ຢ່າງໃດ ຫາກແຕ່ແມ່ນ ນ້ຳ ມັນພືເສດປຸ້ງຂຶ້ນສະເພາະ ເພື່ອພະລິດຜົນປະເພດນີ້ພຸ້ນຫົດຮວາດ ມາ.

ທ່າທີຂອງລາວກົງກັນຂ້າມກັບ ກາລີນາ ອີວາໂນວິດ ແບບຂາວ ກັບດຳ. ບໍ່ມີຫຍັງເຮັດໃຫ້ລາວ ໂມໂຫໂທໂສ ຫລືຕົ້ນເຕັ້ນອອນ

ຊອນ. ອາລົມຈິດຂອງລາວສະເທືອນ ແລະ ແຝງຄວາມເບີກບານຫນ້ອຍ ຫນຶ່ງ. ເວລາເວົ້າກັບພວກເດັກນ້ອຍບໍ່ວ່າຜູ້ໃດແມ່ນແຕ່ກັບຫມໍຂີ້ໂງ່ ກາລາແຕ້ງໂກ ກໍຕາມ ລາວໃຊ້ສັບພະນາມພະຫູພົດບຸລຸດທີສອງສະ ເທືອໂດຍບໍ່ຂຶ້ນສຽງແຮງ ແຕ່ກໍບໍ່ສະແດງໄມຕີຈິດມິດຕະພາບກັບໃຜ ຫນຶ່ງ. ພວກເດັກນ້ອຍຮູ້ສຶກແປກໃຈ ງົງ ງວຍ ຕໍ່ທ່າທີຂອງລາວ ບໍ່ ເລີກບໍ່ແລ້ວ ເມື່ອ ປຣິໂກດໂກດ້ຶງປະຕິເສດວ່າ: "ຫມາກຫ້ວ້າ* ບ້ັນຫວະ! ເວນຕາຍເອ້ີຍ ຂ້ອຍບໍ່ຢາກຮັບຜິດຊອບເລື່ອງຫມາກ ຫ້ວ້າເລີຍ!" ແຊເຣີ ສະແດງຄວາມປະຫລາດໃຈຢ່າງຫນ້າຮັກ ແຝງ ດ້ວຍຄວາມເຂົ້າໃຈອັນດີ ເຂົາຕອບສຽງເສີຍໆ ບໍ່ເຍາະເຍ້ີຍຢ່າງໃດ ຫນຶ່ງວ່າ:

-ອ່າ...ເຈົ້າບໍ່ຢາກເຮັດວຽກນ້ີ້ຊັ້ນຫວະ? ຄັນຊັ້ນບອກຊື່ສຽງ ເຈົ້າໄວ້ດຸ ເພື່ອວ່າເທ່ືອຫນ້າເທ່ືອໃນ ຂ້ອຍຊິບໍ່ໄດ້ມອບວຽກໃຫ້ເຈົ້າ ອີກ!

-ຂ້ອຍເຮັດວຽກຫຍັງກໍໄດ້ ແຕ່ບໍ່ແມ່ນວຽກຮັບຜິດຊອບຫມາກ ຫ້ວ້າ.

-ບໍ່ຕ້ອງຢ້ານດອກ. ເຊ່ືອໃຈໂລດ ຂ້ອຍຊິບໍ່ໃຊ້ເຈົ້າເລີຍ ຊັ້ນ ເຊ່ີນເຈົ້າໄປຫາເຮັດວຽກທາງອ່ືນເດ້ີ.

-ເປັນຫຍັງລະ!

-ກະລຸນາບອກຊ່ືເຈົ້າມາກ່ອນ, ຂ້ອຍບໍ່ມີເວລາເວົ້າເລ່ືອງໄຮ້ສາ ລະດອກ.

---

*ຫມາກໄມ້ເນ້ືອອ່ອນເປັນພຸ່ມ, ລົດຫວານ ສີແຫລ້ ເປ່ືອກ ບາງຫນ່ວຍນ້ອຍໆ.

ທ່າທາງຜະຫຍອງເດັດດ່ຽວຂອງຫມໍ ຍອບຍຸບລົງທັນຕາເຫັນ, ປຣິໂກດໂກ ຍ່າງຄໍເຕື່ອຍໄປຫາພຸ່ມຫມາກຫວ້າ ເຊົ່ຶາຫນໍ່ງນາທີ ກ່ອນນີ້ຫມໍຍັງຢືນຢັນເດັດຂາດວ່າຢູ່ໃກ້ກັບມັນບໍ່ໄດ້.

ແຊເຣີ ເອງຍັງຫນຸ່ມຢູ່ ແຕ່ເຖົ້າປານນັ້ນເຂົາກໍຍັງເຮັດໃຫ້ພວກເດັກນ້ອຍຕົ້ນເຕັ້ນນໍາບໍ່ແລ້ວຍ້ອນຄວາມເຊື່ອຫມັ້ນອັນຫນັກແຫນ້ນ ແລະສະມັດກະພາບໃນການອອກແຮງງານ ແບບເຫນືອມະນຸດຂອງເຂົາ, ປາກົດວ່າ ແຊເຣີ ບໍ່ຫລັບບໍ່ນອນຈັກເທົ່ອ, ເມື່ອນິຄົມຫາກໍຕົ້ນນົນຕາມັ້ນ ແຊເຣີ ຍ່າງເລາະລົງຢູ່ກາງທົ່ງແລ້ວ ລໍາຂາອ່າວຍາວບໍ່ສົມຮ່າງຂອງເຂົາກ້າວໂຢ່ງໄປຄ້າຍຄືຂາມ້າພັນພິເສດ. ເວລາກະແລ່ງຕີບອກເວລາເຂົ້ານອນ ແຊເຣີ ຍັງຢູ່ຄອກຫມູ ເຈລະຈາເລື່ອງໃດເລື່ອງຫນຶ່ງກັບຊ່າງໄມ້. ໃນຕອນກາງເວັນສາມາດເຫັນເຂົາຢູ່ຄອກມ້າແດ່, ຢູ່ເຮືອນແກ້ວ ເຊົ່ຶາຢູ່ໃນລະຫວ່າງກໍ່ສ້າງຄອນໆຊໍ້ຢູ່ບົນຫົນທາງເຂົ້າໃນເມືອງຫລື ຢູ່ນໍາກອງນຂົນຝຸ່ນໄປທົ່ງນາ; ໃຜໆຕ່າງກໍຮູ້ສຶກວ່າທັງຫມົດເຫລົ່ານີ້ເກີດຂຶ້ນພ້ອມໆກັນ ທັງນີ້ຍ້ອນວ່າຂາຍາວໂຢ່ງຂອງເຂົານັ້ນເອງ ທີ່ພາເຂົາຍ້າຍຄົ້ງໄປພຸ້ນມາພ້ຶຢ່າງວ່ອງໄວ.

ໃນມ້ຶ້ທ່ີສອງນັ້ນເອງ ແຊເຣີ ກໍຜິດກຽງກັບ ອານໂຕນຢູ່ຄອກມ້າ. ອານໂຕນນັ້ນບໍ່ຍອມເຂົ້າໃຈ ຫລືເຫັນດີໃຫ້ໃຜປະຕິບັດນໍາສັດເປັນໆທ່ີຫນ້າຮັກ ເຊ່ັນມ້າແບບໃຊ້ຫລັກການແນ່ນອນທາງຄະນິດສາດຄົ່ງ້ຂ້ຶ້ແນະແນບຈ້ົ່ຈ່ັນຂອງເອດວກ ນິໂກລາຍວິດຄົນນ້ີ.

-ແມ່ນເພ່ິນເກີດມ້ີຫົວຄິດໃຫມ່ຫຍັງອ້ີກ? ຊ່ັ່ງວ່າຕ? ໃຜເຄ້ີຍເຫັນ ເພ່ິນຊ່ັ່ງເພ້ືອງແດ່? ລາວວ່ານ້ີເດ້ັ້ຍັດຕາຂອງມ້ານະ! ບໍ່ຫລຸດ

ບໍ່ລົ້ນນີ້. ແລ້ວກໍເກີນວ່າເປັນຕາຢາກຫົວສາ ອັນອັດຕາອາຫານ້ຳ ຫັ້ນຈັກແມ່ນຫຍັງບຸ ແນວລະເລັກລະນ້ອຍ. ຄັນນ້ຳຕາຍເດ້ລະ... ແມ່ນໃຜຮັບຜິດຊອບ? ແມ່ນຂ້ອຍ. ຍິ່ງໄປກ່ວານີ້ ລາວຍັງໃຫ້ມັນ ນິຕາຕະລາງເຮັດວຽກ, ລາວຄຶດຢາກໃຫ້ມີປັ໊ມຈັກຫົວ ເພື່ອໃຫ້ ຂ້ອຍຂຽນບັນທຶກວັນເວລາທີ່ນ້ຳແຕ່ລະໂຕເຮັດວຽກໃສ່.

ແຊເຣີ ບໍ່ຫວາດຫວັ່ນຕົກໃຈແຕ່ຢ່າງໃດ ເມື່ອ ອານໂຕນ ຮ້ອງ ໂຮຕາມນິໄສ ແລ້ວ ປະກາດວ່າຈະບໍ່ຍອມໃຫ້ນ້ຳບັກມິນລ້ຳ ເພາະ ຕາມໂຄງການຂອງມັນນັ້ນ ນ້ຳໂຕນີ້ຈະຕ້ອງໄດ້ອອກໄປເຮັດວຽກພິ ເສດອັນໃດອັນຫນຶ່ງໃນມື້ອື່ນຟຸ້ນ. ເອດວກ ນິໂກລາຍວິດ ລ່ວງ ເຂົ້າໄປໃນຄອກນ້ຳ ແລ້ວເອົານ້ຳບັກມິນລ້ຳອອກມານັດທຽມກວຽນ ໂດຍບໍ່ເສືອກແສງຕາເບິ່ງ ບຣາເຊັນໂກ ເຊິ່ງໂຕສັ່ນຍ້ອນຄວາມບ້ຳ ອາດລວ່ຳອັນນີ້: ອານໂຕນ ຫນ້ານ້ຳໃຄ່ໂຍນແສ້ກ້ຳໄປແຈຫນຶ່ງ ແລ້ວຍ່າງອອກມາ. ແຕ່ໃນຕອນແລງ ເມື່ອເຂົ້າໄປເສືອກຕາເບິ່ງ ຄອກນ້ຳ ກໍຈຶ່ງເຫັນອອກລົບກັບປູບລົກ ມາເປັນເຈົ້ານ້ຳກໍເຈົ້າການຢູ ໃນຫັ້ນ, ອານໂຕນ ເຈັບແສບຫົວໃຈເປັນທີ່ສຸດ, ມັນແຍງຫນ້າ ມາຫາຂ້າພະເຈົ້າ, ຕັດສິນໃຈຂໍລາອອກຈາກຕຳແຫນ່ງແຕ່ພໍມາຮອດ ກາງເດີ່ນ ກໍສວນທາງກັບ ແຊເຣີ ເຊິ່ງກຳເຈ້ຍໃບຫນຶ່ງຢູ່ໃນມື, ເຂົາ ລືອໄປໃສ່ ອານໂຕນ ຄືກັບວ່າບໍ່ເຄີຍມີເລື່ອງກັນມາກ່ອນ ທັ້ງກົ້ມ ຫົວຄຳນັບຢ່າງນອບນ້ອມໃສ່ໃບຫນ້າຂຶງຄຽດຂອງຫົວຫນ້າ ຄອກນ້ຳ ພວກເຮົາ:

-ຟັງຫນີ້ກ່ອນ ເຈົ້າຊື່ວ່າ ບຣາເຊັນໂກ ແມ່ນບໍ? ນັ້ຶແຜນ ການວຽກສຳລັບເຈົ້າໃນອາທິດນີ້ ເຈົ້າເບິ່ງແລ້ວຊິເຫັນຂ້ຶນຳລະອຽດ

ສຳລັບວຽກງານປະຈຳວັນຂອງສັດແຕ່ລະໂຕ ຊິຮູ້ວ່າຍາມໃດເອົາມັນ ອອກມາແລະອື່ນໆ. ຢູ່ຫນ້ານີ້ຂຽນບອກໄວ້ຫມົດວ່າມ້າໂຕໃດຈະ ຕ້ອງໃຊ້ທຽມກວຽນເຂົ້າເມືອງ, ໂຕໃດພັກຜ່ອນ, ເຈົ້າເອົາຕາຕະ ລາງນີ້ໄປຄົ້ນຄ້ວາພິຈາລະນາກັບຫມູ່ເດ໊ກ່ອນ ເອົາມາໃຫ້ຂ້ອຍ ເບິ່ງ ພ້ອມດ້ວຍຂໍ້ດັດແປງຕາມທີ່ເຈົ້າເຫັນສົມຄວນ!

ບຣາເຊັ່ນໂກ ຈັບເອົາເຈ້ຍແຜ່ນນັ້ນດ້ວຍຄວາມປະຫລາດໃຈ ແລ້ວຍ່າງກັບຄືນມາຄອກມ້າ.

ແລ້ວມື້ຕໍ່ມາ ພວກເຮົາກໍເຫັນຫົວຫຍອງຫຍ້າຂອງ ອານໂຕ ກັບຫົວສວດແຫລມ ຕັດຜົມຫ້ຽນຂອງ ແຊເຣ ຮຽງຫ່ຽງເຂົ້າຫາ ກັນຢູ່ໃນຫ້ອງການຂອງຂ້າພະເຈົ້າ ເຊິ່ງກາຍເປັນບ່ອນເປີກສາຫາ ລືວຽກງານຂອງນິຄົມ. ຂ້າພະເຈົ້ານັ່ງຢູ່ໂຕະແຕ້ມຮູບ ທັງເຮັດວຽກ ໂຕເອງ ທັງຫ່ຽງຫູຟັງການໂອ້ລົມສົນທະນາຂອງພວກເຂົາເປັນລະ ຍະໆ.

-ຂໍ້ສັງເກດຂອງເຈົ້າຖືກຕ້ອງແລ້ວ ຕົກລົງ ມ້ວນຟຸດໃຫ້ບັກ ແດງກັບ ອີ່ໂຈນ ອອກເຮັດວຽກ...

-ມ້າບັກນ້ອຍຊິບໍ່ກິນຫົວຜັກກາດເດ໊...ມັນເຈັບແຂ້ວ...

-ບໍ່ເປັນຫຍັງດອກອັນນັ້ນ, ເຮົາຜັກໃຫ້ມັນນຸ່ນໆຈັກຫນ້ອຍ, ທົດລອງເບິ່ງເດ໊...

-ແຕ່ວ່າຖ້າມີຜູ້ອື່ນໆຢາກເຂົ້າໄປໃນເມືອງຕົ້ມເດ້ ຊິເຮັດແນວ ໃດ?

-ກະໃຫ້ພວກເຂົາຍ່າງໄປເອງ ຫລືວ່າໄປເຊົ່າກວຽນໄຫບ້ານ ພຸ້ນ...ບໍ່ກ່ຽວກັບເຈົ້າຫລືກັບຂ້ອຍເລີຍ.

- ໂອ່!...ອັນນີ້ແມ່ນຖືກຕ້ອງທີ່ສຸດ! ອານໂຕນຮ້ອງຂຶ້ນ.

ເວົ້າກັນຕາມຄວາມຈິງແລ້ວໃຊ້ມ້າໂຕດຽວ ສຳລັບທຽມກອງນ ທຽວໄປໃນເມືອງກໍບໍ່ພຽງພໍຢູ່ແລ້ວ ແຕ່ປານນັ້ນ ກາລິນາ ອິວາໂນ ວິດ ກໍຍັງບໍ່ສາມາດຕໍ່ສູ້ກັບ ເຊເຣີໄດ້, ລາວເວົ້າຕັດຂໍ້ອ້າງອີງອັນ ເຕັມໄປດ້ວຍຕັກກະສາດຂອງຫົວຫນ້າເສດກະກິດພວກເຮົາດ້ວຍ ຄຳ ຕອບແບບຄົນໃຈເຢັນທຸ່ນທ່ຽງວ່າ:

- ເລື່ອງຄວາມຕ້ອງການຍານພາຫານະຂອງພວກເຈົ້າ ບໍ່ກ່ຽວ ຂ້ອງກັບຂ້ອຍພໍດີ. ເຈົ້າຢາກແບກເຄື່ອງແບກຂອງໃສ່ຫລັງມາກໍແມ່ນ ເລື່ອງຂອງເຈົ້າ. ຫລືວ່າ ຊື້ມ້າສາອີກຈັກໂຕ. ຂ້ອຍມີເງິນທີ່ຈະຕ້ອງ ປູກຝັງໃສ່ຮອດ ຜ ເດເຊຍຕີນ! ຊິຂອບອົກຂອບໃຈເຈົ້າຫລາຍໆ ຖ້າຊິບໍ່ມາເວົ້າຮອດບັນຫານີ້ຄືນອີກ!

ກາລິນາ ອິວາໂນວິດຟາດກຳປັ້ນລົງໃສ່ໂຕະຫມົດແຮງທັ້ງຮ້ອງ ວ່າ:

- ເອີ ຄົນຈຳເປັນມາກູນີ້ລະ ຊິລາກເອົາມ້າມາທຽມໃສ່ກອງນເອງ ນ໋ະ!

ເຊເຣີ ກົ້ມຫນ້າຂຽນອັນໃດອັນຫນຶ່ງລົງໃສ່ປຶ້ມຂອງລາວ. ຄວາມໂມໂຫໂທໂສຂອງ ກາລິນາ ອິວາໂນວິດຮອດບໍ່ເຮັດໃຫ້ລາວ ເສຶອກແສງຕາມາເບິ່ງ. ຫນຶ່ງຊົ່ວໂມງຕໍ່ມາ ເມື່ອຈະອອກຈາກຫ້ອງ ການ ລາວບອກເຕືອນຂ້າພະເຈົ້າວ່າ.

- ຖ້າວ່າຕາຕະລາງເຮັດວຽກຂອງມ້າຖືກກະເທືອນໂດຍທີ່ຂ້ອຍບໍ່ ເຫັນດີນຳ...ຂ້ອຍອອກຈາກນິຄົມໃນມື້ນີ້ໂລດ!

ຂ້າພະເຈົ້າຟ້າວສົ່ງຄົນໄປເອີ້ນ ກາລິນາ ອີວາໂນວິດມາຫາແລ້ວ ບອກລາວວ່າ :

- ຢ່າໄປສົນກັບພັນເດ້ຫມໍນີ້, ເຈົ້າສູ້ພັນບໍ່ໄດ້ດອກ.

- ແລ້ວຂ້ອຍຊິເຮັດແນວໃດລະ, ນ້ຳໂຕດຽວ ທ້ຳຊິໄປໃນເມືອງ ທ້ຳຊິຂີ່ນ້ຳຂີ່ນ ເອົາເຂົ້າປາອາຫານມາໃຫ້ນິຄົມ...

- ພວກເຮົາຫາກຊິຫາທາງແກ້ໄດ້ດອກ.

ແລ້ວພວກເຮົາກໍແກ້ໄດ້.

ນິຄົມໃຫມ່ກໍມີພັນຫາໃຫມ່, ນິຄົມໃຫມ່, ທ້າວ ໂຮດິມຊິກ ຜູ້ຂາດສະມັດກະພາບຢູ່ນິຄົມໃຫມ່, ວາດຊີ້ແບບໃຫມ່ອັນກ້ຶກຕ້ອງ ຂອງເດັກນ້ອຍ, ຄວາມຂາດໆເຂີນໆທີ່ຍັງຄ້າງຄາຢູ່ທ່າມກາງ ຄວາມຮັ່ງມີອັນທະວີຄູນຂຶ້ນທຸກວັນຂອງພວກເຮົາ, ຮູບພາບຫລາຍ ແບບຫລາຍແນວຂອງຊີວິດພວກເຮົາຫຸ້ມຫໍ່ຮ່ອງຮອຍຄວາມລ່ອຍລາ ແລະຄວາມຂົມຂື່ນເສົ້າໃຈຂອງພວກເຮົາຈົນຫມົດກ້ຽງໂດຍທີ່ຂ້າພະ ເຈົ້າເອງບໍ່ໄດ້ສັງເກດເຫັນພຽງແຕ່ວ່າ ນັບແຕ່ວັນນັ້ນມາ, ຂ້າພະເຈົ້າ ກາຍເປັນຄົນຍ້ຶມຫ້ອຍາກ ຄວາມເບີກບານແຈ່ມໃສທີ່ຟອງຟົດຢູ່ໃນ ໂຕຂອງຂ້າພະເຈົ້າ ຂາດພະລັງແຮງເພື່ອຈະບຸຫມ້ົນອອກສະແດງຕົວ ເຫນືອຄວາມເຂັ້ມງວດກວດຂັນຮູບນອກ ເຊ່ິງສະຖານະການກັບສະ ພາບຈິດໃຈລະຫວ່າງທ້າຍປີ ໑໙໔໔ ໄດ້ຍັດຢູ່ໃຫ້ຄືກັບຫນ້າກາກ ແຜ່ນຫນຶ່ງ, ຫນ້າກາກແຜ່ນນີ້ບໍ່ເຮັດໃຫ້ຂ້າພະເຈົ້າອຸກອັ່ງດອກ ແລະ ຂ້າພະເຈົ້າກໍເກືອບວ່າບໍ່ສັງເກດເຫັນມັນຊ້ຳ. ແຕ່ພວກເດັກນ້ອຍນັ້ນ ຕິ ພວກເຂົາເຫັນມັນຢູ່ເລ້ືຍໆ, ບາງທີພວກເຂົາກໍອາດຮູ້ວ່າ ນັ້ນ ແມ່ນຫນ້າກາກແຕ່ເກ່ືຍງນັ້ນ ຕໍ່ຫນ້າຂ້າພະເຈົ້າ ພວກເຂົາກໍ

ຫາກມີທ່າທີຄ່ອຍໍ້າແຢ່ງແບບພິລຶກແຝ່ງດ້ວຍຄວາມຮູ້ສຶກທ່ຽງເທົ່ານ ແລະຄວາມຢ້ານກົວຫນ້ອຍຫນຶ່ງ, ຂ້າພະເຈົ້າເອງກໍບໍ່ຮູ້ຄຶກແນ່ວ່າ ມັນແມ່ນຫຍັງແທ້ໆ ແຕ່ໃນເວລາດຽວກັນນັ້ນ ຂ້າພະເຈົ້າຊໍ້ເຫັນ ວ່າພວກເຂົານັ້ນເບີກບານແຈ່ມໃສຂຶ້ນທຸກໆເທື່ອທີ່ ຂ້າພະເຈົ້າຫາກ ສະແດງຄວາມຮັກແພງ, ເກີດມີຄວາມໃກ້ຊິດຕິດພັນກັນຢ່າງເລິກ ເຊິ່ງແທ້ຈິງ, ເຊັ່ນວ່າທຸກໆຄັ້ງທີ່ຂ້າພະເຈົ້າມາຮ່ວມຫລິ້ນຫົວຍອກ ລໍ້ກັບພວກເຂົາແບບເປັນກັນເອງ ຫລືພໍພຽງແຕ່ວ່າໄດ້ຍ່າງກອດແອວ ກັນໄປຊື່ໆກໍຕາມ.

ຢູ່ໃນການດຳລົງຊີວິດຂອງນິຄົມເອງ ຄວາມເຂັ້ມງວດເຄັ່ງຄັດ ອັນບໍ່ຈຳເປັນຫລາຍຢ່າງໄດ້ສາບສູນໄປແລ້ວ. ບໍ່ມີຜູ້ໃດສັງເກດເຫັນ ວ່າການປ່ຽນແປງແບບນີ້ອຸບັດຂຶ້ນແຕ່ຍາມໃດ. ຄືກັນກັບແຕ່ຄາວ ກ່ອນ ບັດນີ້ສຽງຫົວສຽງເວົ້າຍອກໄຍກັນດັງຢູ່ທຸກຈອກແຈ ແຕ່ລະ ຄົນເບີກບານອາລົມດີພໍສົມຄວນ. ສິ່ງດຽວທີ່ແຕກຕ່າງ ກັບແຕ່ກ່ອນກໍແມ່ນວ່າທັງຫມົດເຫລົ່ານີ້ ສະຫງ່າງາມຂຶ້ນກ່ວາເກົ່າ ຍ້ອນຂາດການໂຍະຍານ ຂາດຄວາມຮ້ອນຮົນກະວົນກະວາຍຢ່າງບໍ່ ມີເປົ້າຫມາຍແລະຄວາມຂີ້ຄ້ານລ່ອຍລາ.

ໃນທີ່ສຸດ ກາລິນາ ອິວາໂນວິດ ກໍສາມາດຊອກວິທີແກ້ໄຂ ຄວາມຫຍຸ້ງຍາກກ່ຽວກັບພາຫະນະຂົນສົ່ງໄດ້. ລາວໄດ້ກອງນກະ ແທະທຽມງົວນັກ ກາວຣີອຸຊະກາ, ແຊເຣີ ເອງບໍ່ອ້າປາກຄັດຄ້ານ ແຕ່ຢ່າງໃດ ເພາະວ່າງົວໂຕດຽວ ຈັກຊີໃຊ້ເຮັດຫຍັງໄດ້? ຈັ່ງຊັ້ນງົວ ກັບກອງນກະແທະ ຈຶ່ງສາມາດຂົນນ້ຳຂົນຟືນ ຮັບໃຊ້ວຽກງານຕົ້ນຕໍ ຢູ່ພາຍໃນນິຄົມ ໃນຕອນແລງຄ້ອຍຄ່ຳຂອງເດືອນເມສາ ອາກາດ

ພວມຫນາວເຢັນຫນ້າອອນຊອນ ສະນາຊຶກນິຄົມທ້າງຫນຶ່ງ ຈຶ່ງໄດ້ຫົວກັນທ້ອງຄິດທ້ອງແຂງແບບບໍ່ເຄີຍໄດ້ຫົວມາກ່ອນຄືນແລ້ວ ຕໍ່ຫນ້າພາບ ອານໂຕນ ຂີ່ກອງນກະແທະທຽມງົວກາວຣີອຸຊະກາ ເຂົ້າໃນເມືອງເພື່ອໄປຮັບຫໍ່ເຄື່ອງ.

-ເຮ້ຍ ເພິ່ນຊິຈັບໂຕໄວ້ແລ້ວ! ຂ້າພະເຈົ້າ,ວ້າກັບຫມໍ.

-ກະລອງເບິ່ງໂລດແຫລ້ວ! ອານໂຕນ ຕອບທັນທີ, -ບັດນີ້ ທຸກສິ່ງທຸກຢ່າງ ສະເຫມີພາບກັນຫນົດແລ້ວເດ້ ແລ້ງົວບັກກາວ ຣີອຸຊະກາ ນີ້ມັນມີຫຍັງຕ້ອຍຕໍ່ກ່ວາມ້າຊັ້ນຫວະ? ມັນກໍແມ່ນຜູ້ ອອກແຮງງານຄືກັນເດ໊!

ຈັ່ງຊັ້ນງົວກາວຣີອຸຊະກາ ຈຶ່ງແກ່ກອງນກະແທະເຂົ້າເມືອງໂດຍ ບໍ່ສະດຸ້ງສະເທືອນຕໍ່ສິ່ງໃດໆຫນົດ.

ບົດທີ ๔๔

ເຊນີຍ໋ ອຸກໃຈ

ແຊເຣ ດໍາເນີນວຽກງານຂອງເຂົາຢ່າງເຂັ້ມງວດຂັນແຂງ, ເຂົາ ຫວ່ານແນວປູກພືດຫມຸນວຽນຕ່າງກັນຮອດ ຝ ຢ່າງ ທັງຮູ້ຈັກເຮັດ ໃຫ້ແຜນການອັນນີ້ກາຍເປັນເຫດການຫນຶ່ງທີ່ປະສົບຄວາມສໍາເລັດ ຢ່າງແທ້ຈິງຢູ່ພາຍໃນນິຄົມຂອງພວກເຮົາບໍ່ວ່າຢູ່ກາງທົ່ງ ຄອກມ້າ ຄອກຫມູ, ຫໍພັກ, ຂະນະຍ່າງໄປຕາມທາງຫລືພໍພຽງແຕ່ໃນເວລາ ຍ່າງກາຍຫ້ວຍນ້ໍາ, ຢູ່ໃນຫ້ອງການຂອງຂ້າພະເຈົ້າ ຢູ່ໃນໂຮງອາ ຫານ ແຊເຣ ມັກເຮັດໃຫ້ເກີດມີກຸ່ມຮຽນວິຊາກະສິກໍາແບບໃຫມ່ ເລື້ອຍໆ. ພວກເດັກນ້ອຍເອງກໍບໍ່ໄຊ້ວ່າຕ້ອນຮັບຄໍາສັ່ງຂອງເຂົາຢ່າງ

ງ່າຍໆສະເຫມີໄປ ສ່ວນແຊເຣີເອງກໍບໍ່ປະຕິເສດທີ່ຈະຮັບຟັງຂໍ້ສັງ
ເກດອັນສົມເຫດສົມຜົນຂອງພວກເຂົາ, ບາງເທື່ອເຂົາຂະຫຍາຍ
ເຫດຜົນດ້ວຍນ້ຳສຽງເຄັ່ງຄັດແຂງກະດ້າງອ້າງເຫດຜົນສັ້ນໆ ແຕ່
ກໍສຸດລົງດ້ວຍຄຳສະຫລຸບອັນດຽວແບບບໍ່ມີໃຜຄັດຄ້ານໄດ້ວ່າ: "ເຮັດ
ຄືຂ້ອຍບອກນັ້ນລະ".

ເຂົາຍັງຄົງສືບຕໍ່ໃຊ້ເວລາຫມົດມື້ຫມົດເວັນຢູ່ກັບວຽກງານ ອັນ
ຫນັກຫນ່ວງ ບໍ່ສະແດງຄວາມຮ້ອນຮົນອົນວາຍອັນໃດອອກມາ ຈົ່ງ
ເປັນການລຳບາກບໍ່ຫນ້ອຍທີ່ຈະຕິດຕາມເຂົາຢູ່ຕະຫລອດເວລາ ໃນ
ຂະນະທີ່ເຂົາເອງສາມາດໄປຢືນຢູ່ຄອກສັດ ເປັນເວລາສອງສາມຊົ່ວ
ໂມງຫລືຍ່າງຕິດຕາມເຄື່ອງຈັກຫວ່ານແນວປູກຕະຫລອດ 5 ຊົ່ວໂມງ
ສາມາດຍ່າງວົນວຽນກັບໄປກັບມາຫາຄອກຫມູເກືອບທຸກໆ ສິບນາທີ
ເພື່ອສັ່ນຈ້ຽພວກລ້ຽງຫມູ ດ້ວຍຄຳຖາມສຸພາບແຕ່ຫາກລ່ຳໄລຄ້ຶງ
ວ່າ:

-ພວກເຈົ້າເກືອຫມູນ້ອຍຕອນຈັກໂມງ? ພວກເຈົ້າບໍ່ລືມເລື່ອງ
ຈິດນັນທຶກຕິ? ຂຽນໄວ້ຖືກຕ້ອງບໍ່ລະ? ແລ້ວພວກເຈົ້າກະກຽມທຸກ
ຢ່າງຮຽບຮ້ອຍແລ້ວເບາະ ເພື່ອຊິອາບນ້ຳຫມູນ້ອຍນະ?

ບໍ່ດົນພວກເດັກນ້ອຍກໍເລີ່ມສະແດງຄວາມຮູ້ສຶກສະອົ້ນສະອອນ
ຕໍ່ ແຊເຣີ, ພວກເຂົາຮູ້ສຶກ ແລະເຂົ້າໃຈເອົາເອງແລ້ວວ່າ "ແຊເຣີ
ຂອງພວກເຮົາ" ນັ້ນເປັນ "ຄົນພິເສດ" ກໍຍ້ອນວ່າ ລາວເປັນຄົນ
"ພວກເຮົາ" ຈົ່ງຊັ້ນກ້າລາວໄປຕົກຢູ່ບ່ອນອື່ນ ແມ່ນອນວ່າລາວຈະ
ບໍ່ໄດ້ຮັບຄວາມນິຍົມຊົມຊອບປານນີ້. ຄວາມຮູ້ສຶກດັ່ງກ່າວສະແດງ
ຕົວອອກມາຢ່າງມິດງ້ຽດ້ວຍການຍອມຮັບອິດທິພົນຂອງລາວ ແລະ

ການສຶກສາແບບສຸດສັ່ງບໍ່ເປັນ ເຊິ່ງກໍ່ຂຶ້ນຈາກຄຳເວົ້າຄຳຈາທ່າ
ທີ, ນິໄສສຸຂຸມບໍ່ຕື່ນເຕັ້ນຕໍ່ສິ່ງໃດໆ ແລະຄວາມຮອບຮູ້ຂອງລາວ.

ຂ້າພະເຈົ້າເອງ ບໍ່ຮູ້ສຶກແປກຕ່າງໃຈຫຍັງຕໍ່ອາລົມຈິດອັນນີ້ ຂ້າ
ພະເຈົ້າຮູ້ຢູ່ແລ້ວວ່າ ພວກເດັກນ້ອຍຈະບໍ່ຍອມຮັບຮູ້ເອົາທິດສະດີທີ່
ວ່າ ພວກເຂົານັ້ນຈະເກີດມີຄວາມຮັກແພງກັບຜູ້ຄົນທີ່ສະແດງໄມຕີ
ຈິດຕໍ່ພວກເຂົາ ແລະກັບຜູ້ທີ່ອ່ອນຫວານກັບພວກເຂົາ ເທົ່ານັ້ນ.
ເທົ່ານານມາແລ້ວ ທີ່ຂ້າພະເຈົ້າເຊື່ອໝັ້ນວ່າ ເດັກນ້ອຍໂດຍສະ
ເພາະເດັກນ້ອຍທີ່ອາໄສຢູ່ໃນນິຄົມພວກເຮົານີ້ ເກີດຄວາມຮູ້ສຶກຜູກ
ພັນນັບຖືໃນຕົວບຸກຄົນອີກປະເພດຫນຶ່ງຕ່າງຫາກ. ຄົນປະເພດນີ້
ແມ່ນຜູ້ທີ່ມີຄຸນສົມບັດສູງມີຄວາມຮູ້ຫນັກແຫ້ນແນ່ນອນ ແທ້ຈິງ,
ມີຄວາມສາມາດ, ມີຝີມື, ມີວາຈາເຂັດຢຳແນ່ນອນບໍ່ເວົ້າຫລາຍ,
ມີທ່າທີແບບສະຫຳສະເຫມີຕໍ່ການອອກແຮງງານທັງຫມົດນີ້ແມ່ນສະ
ເຫນດຶງດູດຈິດໃຈເດັກນ້ອຍໄດ້ແຮງກ່ວາຫມູ.

ອາດຈະເຮັດກັບພວກເຂົາແບບແຫ້ງກະແດ້ງສຸດຂີດ, ຮຽກຮ້ອງຈູ້
ຈົ້ກັບພວກເຂົາຈົນເປັນຕາຫົນຫວຍ, ບໍ່ສົນໃຈໄຍດີນຳແມ່ນແຕ່
ເວລາພວກເຂົາຕິດຕ້ອຍຫ້ອຍຕາມ ຈົນກະທັ້ງວ່າບໍ່ອອນຊອນຈົມ
ຊຶ່ນນຳຄວາມເຫັນອົກເຫັນໃຈຂອງພວກເຂົາ ແຕ່ກ້າຫາກວ່າເຈົ້າ
ເປັນຄົນຈິງຈັງຕໍ່ວຽກງານ ເຮັດວຽກງານໄດ້ດີ ຍ້ອນມີຄວາມຮອບຮູ້
ມີຄວາມສຳເລັດ ໃນກໍລະນີນີ້ ເຈົ້າບໍ່ຕ້ອງວິຕົກຫຍັງຫມົດ ພວກ
ເຂົາຈະຫັນມາເຂົ້າຂ້າງເຈົ້າຫມົດ ແລ້ວກໍຈະບໍ່ທໍລະຍົດຕໍ່ເຈົ້າເລີຍ.
ທັງຫມົດນີ້ນັ້ນບໍ່ຂຶ້ນກັບວ່າສະມັດກະພາບຂອງເຈົ້າເປັນແນວໃດຫລື

ວ່າເຈົ້າມີອາຊີບຫຍັງ? ເປັນຊ່າງໄມ້ຫລືນັກກະເສດ, ເປັນຊ່າງຕີ
ເຫລັກ, ຄູສອນ ຫລືນາຍຊ່າງກົນຈັກ.

ກົງກັນຂ້າມເຊິ່ນເຈົ້າສະແດງຕົວເປັນຜູ້ຊ່ຽງ ເອົາອົກເອົາໃຈ
ຊ່ຽງປາກຊ່ຽງຈາ ເວົ້ານ່ວນຊ່ວນຫົວຫນ້າສົນໃຈເວົ້າກັນຢ່າງເຂົ້າ
ອົກເຂົ້າໃຈກັບພວກເຂົາດີໃນເລື່ອງການດຳລົງຊີວິດການຫລິ້ນທ່ຽວ
ພັກຜ່ອນແຕ່ກ້າຫາກວ່າວຽກງານທີ່ເຈົ້າປະກອບນັ້ນ ບໍ່ປະສົບຄວາມ
ສຳເລັດ ມີແຕ່ຄັ້ນຜິດພາດ ສະແດງອອກທຸກເວລາວ່າ ເຈົ້າເອງບໍ່ຮູ້
ຈັກວຽກງານຂອງຕົນເອງ ກ້າຫາກວ່າທຸກສິ່ງທຸກຢ່າງທີ່ເຈົ້າລົງມື
ນັ້ນເກີດພັງທະລາຍລົ້ມເຫລວລົງ ເວລານັ້ນເຈົ້າຈະບໍ່ໄດ້ຮັບຄວາມ
ເຫັງໃຈຈາກພວກເຂົາເລີຍ ບາງຄັ້ງຍັງຈະຖືກເຍາະເຍີ້ຍຫົ່ນປະ
ຫມາດຊ້ຳຍົ່ງໄປກ່ວານີ້ ພວກເຂົາຍັງສະແດງທ່າທີເປັນບໍລະບັກ
ຫລືເຮັດກະທົບຄືນຢ່າງເປັນລະບົບຄັກແນ່ອີກ.

ຄັ້ງຫນຶ່ງ ມີຊ່າງກໍ່ເຕົາຄົນຫນຶ່ງ ມາເຮັດເຕົາຝັງໃສ່ຫ້ຳພັກໃຫ້
ພວກເດັກນ້ອຍແມ່ຍິງ ພວກເຮົາບອກໃຫ້ລາວກໍ່ເຕົາແບບມີນກົມ.
ເວລາຢ່າງເລາະຫລິ້ນຢູ່ຕາມນິຄົມນັ້ນ ຊາຍຄົນນີ້ຄຸຍໂມ້ຕະຫລອດ
ວັນ ແລະໃນມື້ດຽວກັນນັ້ນ ເຂົາໄດ້ສອນແປງເຕົາຄົໄຟຢູ່ເຮືອນຜູ້ໃດ
ຜູ້ຫນຶ່ງ ໄດ້ສອນແປງຝາຄອກມ້າ. ຊາຍຄົນນີ້ມີຮູບຮ່າງອ່ອນແປກ
ຕ່າງຫມູ່ເລັກນ້ອຍຄ້ອນກົມອຸ້ຍລຸ້ຍ ຍົ້ມແຍ້ມອ່ອນຫວານໄປທົ່ວ
ຮ່າງກາຍ, ຄຳເວົ້າຈາມ່ວນຫູຫນ້າຟັງຊວນໃຫ້ເຊື່ອວ່າໃນໂລກນີ້ບໍ່
ມີຊ່າງກໍ່ເຕົາຄົນໃດ ເກັ່ງກາດເທົ່າກັບລາວ.

ພວກເດັກນ້ອຍປຸ້ມໄປຫ້ຳລ້ອມລາວເປັນຝູງ, ຟັງລາວເວົ້າ
ແບບບໍ່ເຊື່ອກີ່ໜ້ອຍ ແລະເລື່ອງຕ່າງໆທີ່ລາວເວົ້າຂຶ້ນນັ້ນ ກໍເຮັດ

ໃຫ້ພວກເຂົາ ເກີດມີປະຕິກິລິຍາໃນທາງກົງກັນຂ້າມກັບທີ່ລາວຄາດ ໄວ້ຊໍ້າ.

-ພວກສູເອີ້ຍ! ກູບອກສູແລ້ວນ່າວ່າ ມີຊ່າງກໍ່ເຕົາອື່ນໆຢູ່ ດອກ. ເກົ້າແກ່ອາຈຸໂສກ່ວາຫມູ່ກູກໍມີແຕ່ ຍາທ່ານຫມ່ອມເຈົ້າ ເພິ່ນບໍ່ຕ້ອງການໃຜຫມິດ. "ໄປ... ສູໄປນໍ ອາກເຕມີມາໃຫ້ກູ!" ເພິ່ນສັ່ງເຂົາແນວນີ້ລະ, "ຫມໍນີ້ ມາເຮັດເຕົາ ເຈົ້າຊິເປັນເຕົາ", ແນ່ນອນວ່າ ເວລານັ້ນ ກູຍັງເປັນຊ່າງໃຫມ່ຢູ່ໃດ໋... ແລ້ວການໄປກໍ່ ເຕົາໃສ່ເຮືອນໃຫ້ຍາທ່ານຫມ່ອມເຈົ້າ... ຫັ້ນສູຮູ້ບໍ່ວ່າມັນເປັນຈັ່ງ ໃດ... ບາງເວລາຍາທ່ານອອກມາສ່ອງເຫັນ ກູ ເບິ່ງເຕົາແລ້ວບອກ ວ່າ "ເຮັດຄັກໆສຸດຝີມືເດ໋ ອາກເຕມີ... ເຮັດຄັກໆ."

-ເອ໋ ແລ້ວເປັນແນວໃດລະ... ກະເປັນເຕົາເບາະ? - ພວກ ເດັກນ້ອຍຖາມຂຶ້ນແຊ່ວໆ.

-ໂຍ້ວ... ຊ່າງວ່າແທ້... ຍາທ່ານຫມ່ອມເຈົ້າມາສ່ອງເບິ່ງ ເລ໋ອຍໆ...

ລາວເປີດຫນ້າຂຶ້ນ ເງີກຫົວລ້ານສອນທ່າທາງຂອງຍາທ່ານ ຫມ່ອມເຈົ້າ ທີ່ພອມສ່ອງເບິ່ງເຕົາກໍ່ໂດຍອາກເຕມີ. ພວກເດັກ ນ້ອຍອົດບໍ່ຟັງເລີຍພາກັນຫົວກ໋ວກໆອອກມາ. ອາກເຕມີ ສອນທ່າ ທີຂອງຍາທ່ານ ບໍ່ຄ໋ຈັກດ໋.

ອາກເຕມີ ເລີ່ມຕົ້ນກໍ່ສ້າງເຕົາຂອງລາວດ້ວຍຄໍາປາໃສອັນສະ ຫງ່າງາມສູງສົ່ງ ທັງກ່ອທອນຄືນເກົ່າເຕົາຝີປະເພດຕ່າງໆທີ່ລາວ ເຄີຍເຫັນ ເຕົາຫມ້ອຍຈີບງາມທີ່ເປັນຜົນງານຂອງລາວ ແລະເຕົາ ຝີຊະນິດ໋ຂີ້ສຸດທີ່ສຸດ ເຊ່ິງເປັນຝີມືຂອງຊ່າງກໍ່ເຕົາຄົນອື່ນໆ ພ້ອມ

ດຽວກັນນີ້ ລາວກໍສາທະຍາຍຢ່າງລ່ຽນໄຫລ ກ່ຽວກັບຄວາມລັບ ທັງຫມົດແຫ່ງສິລະປະໃນຕົວຂອງລາວ ພ້ອມທັງພັນລະນາຈາລະໄນ ເຖິງຄວາມຫຍຸ້ງຍາກ ໃນເວລາກໍ່ເຕົາຝີງອອກມາຈົນຫມົດໄສ້ຫມົດ ພຸງ.

-ອັນສຳຄັນກ່ວາຫມູ່ແມ່ນການຄຶງດ້ວກິງໃຫ້ກືກຕ້ອງ... ອັນນີ້ ຜູ້ອື່ນບໍ່ຮູ້ຈັກດອກ.

ພວກເດັກນ້ອຍແຫ່ໄປຫໍ້ພັກພວກນັກຮຽນຍິງ ພໍປາມແຫ່ໄປ ບຸນກະກຶນ ເພື່ອຕິດຕາມສົ່ງຊອມເບິ່ງອາກເຕມີ "ສາລະວິນ ນຳການ ຄຶງດ້ວກິງ" ຂອງລາວດ້ວຍອາການງຽບສະຫງົບ.

ອາກເຕມີ ຈົ່ມໃບ່ບໍ່ເຊົ່າສົບເຊົ່າປາກ ໃນເວລາກໍ່ພົ້ນເຕົາ ແຕ່ ພໍມາຮອດເຮືອນຕົນເອງ ຄວາມບໍ່ແນ່ໃຈວ່າດີວ່າຫນ້ຳກໍສະແດງ ອອກຢູ່ໃນອາການເຄື່ອນເຫນ້ງຂອງລາວ, ລົ້ນຂອງລາວ ເຊົ່າເຮັດ ວຽກໄປນຳ.

ຂ້າພະເຈົ້າກາຍໄປເບິ່ງລາວເຮັດວຽກ, ພວກເດັກນ້ອຍກ໋ອຍ ຫ່າງອອກທັງເສືອດຕາສອດຮູ້ສອດເຫັນມາໃສ່ຂ້າພະເຈົ້າ.

-ເປັນຫຍັງມັນ ຈ໋ຳປຸ້ງກ່ວາແທ້? ຂ້າພະເຈົ້າກ່ວາມທັງແກວ່ງ ຫົວ.

-ມັນປຸ້ງກ່ວາຊັ້ນຫວາ? ບໍ່ຕ໋ິ... ມັນຊິປຸ້ງກໍ່ຍ້ອນວ່າ ມັນບໍ່ ທັນແລ້ວຄັກຊ໋ືດອກ, ບາດແລ້ວໆຫາກຊິຈົບຮຽບຮ້ອຍຕາມລະ ບຽບ.

ຊາໂດຮອບ ຫລ໋ືຕາສັງເກດເບິ່ງເຕົາຝີງຢ່າງພິຈາລະນາ:

-ແລ້ວອັນຢູ່ເຮືອນຍາທ່ານ ກໍເປັນຊິງນີ້ເບາະ?

ອາກເຕມີ ບໍ່ເຂົ້າໃຈ ຄວາມເວົ້າສຸດສີເລີຍ:

-ກະແທ້ລະບໍ, ເຕົ່າຝົ່ງທຸກຫນ່ວຍ ເປັນຊົ່ງນີ້ ລະຕອນມັນບໍ່ທັນແລ້ວນະ...

ສາມນ້ໍ່ຕໍ່ມາ ອາກເຕມີ ກໍເອົ້ນຂ້າພະເຈົ້າໄປເຊັນຮັບມອບຜົນງານ ສະມາຊິກນິຄົມທັ້ງຫມົດໄປເຕົ້າໂຮມກັນຢູ່ໃນຫໍພັກເດັກນ້ອຍແມ່ຍິງ. ອາກເຕມີຍ່າງວົນວຽນໄປມາອ້ອມເຕົ່າ ທັ້ງເປີດຫົວຂົ້ນ. ເຕົ່າຝົ່ງຕັ້ງຢູ່ກາງຫ້ອງ, ເບ່ງປີກຂ້າງຂອງມັນປູດເບ້ອອອກທຸກທິດທຸກທາງ... ແລະແລ້ວໃນທັນໃດນັ້ນ ມັນກໍພັ່ງຄົ້ມລົງສຸງດັ່ງສະນັ່ນເສດກ້ອນດິນຈົ່ຟົ້ງສະເດັນໄປທົ່ວທົບເຮັດໃຫ້ພວກເຮົາແຕກອອກຈາກກັນແຕ່ສຸງດັ່ງກ່າວກໍບໍ່ດັ່ງທໍ່ກັບສຸງຫົວສຸງຮ້ອງສຸງຄາງທົ່ລະເບີດຂົ້ນຕິດຕໍ່ກັນໃນວິນາທີດຽວນີ້ໂລດ. ຫລາຍຜູ້ຫລາຍຄົນ ໄດ້ຮັບບາດເຈັບເລັກໆນ້ອຍໆ ເນ່ືອງຈາກການອຸບັດເຫດດັ່ງກ່າວ ແຕ່ບໍ່ມີໃຜສົນໃຈ ຕໍ່ຄວາມເຈັບປວດຂອງຕົນເອງດອກ. ຜູ້ແລ່ນເຂົ້າໄປໃນຫໍພັກກໍຫົວ, ຜູ້ແລ່ນໄປລົ້ຕາມລະບຽງ ໃນເດ່ືນ ກໍພາກັນຫົວຈົນໂຕຊິດໂຕ. ຂ້າພະເຈົ້າກົ້ກກ້ອຍອອກຈາກສົ່ງສະຫລັກຫັກພັງ ແລະເຂົ້າໄປໃນຫ້ອງຕິດກັນ ຈົ່ງເຫັນ ບູຮູນ ດ໊ງຄໍເສ້ືອ ອາກເຕມີ ຢູ່, ກໍາປັ້ນເບ້ືອງຫນ້ົ່ງເງ້ືອດຂົ້ນຊ້ີຫົວໂລ້ນເປ້ືອນກ່ານໄຟຂອງລາວ.

ອາກເຕມີຖ້ືກໄລ່ຫນ້ີໄປແລ້ວ ແຕ່ຊ່ືຂອງລາວຍັງຄົ້ງຢູ່ໃນນິຄົມ ໃນການະສັນຍາລັກຂອງຄົນຂ້ີຄຸຍເວົ້າໂມ້ແຕ່ບໍ່ຮູ້ເຮັດຫຍັງ, ພວກເຮົາເວົ້າໃຫ້ກັນວ່າ:

-ຫນ້ີນ້ີເປັນຄົນແນວໃດເກາະ?

-ອາກເຕມີ ຜູ້ຫນ້ົ່ງອ້ອຍຕ້ອຍ, ມ້ົ່ງເບ່ົ່ງບໍ່ອອກຫວະ?

ແຊເຣີ ນັ້ນເປັນຜູ້ມີຄຸນສົມບັດບໍ່ສົງໃຫ້ກັບ ອາກເຕມີໜ້ອຍ ຈັ່ງຊັ້ນລາວຈຶ່ງໄດ້ຮັບຄວາມເຄົາລົບໂດຍທົ່ວໄປ, ສິ່ງດ້ຳ ກ່າວຮັບປະກັນໃຫ້ວຽກງານທາງດ້ານກະສິກຳຂອງພວກເຮົາ ປະສົບ ຄວາມສຳເລັດຢ່າງໄວວາ, ນອກນີ້ ແຊເຣີ ຍັງມີແວວປະເສີດດ້ານ ອື່ນອີກ ນັ້ນຄືຄວາມສາມາດຄົ້ນພົບສົມບັດໃຮ້ທາຍາດ, ຕ່ໍອາຍຸ ຫນ້ງສືສັນຍາ ແລະໂດຍທົ່ວໄປແມ່ນຮູ້ຈັກບ່ອນຂໍ້ສົນເຊື່ອ ຈັ່ງຊັ້ນ ພວກເຮົາຈຶ່ງມີຈັກຕັດຮາກ, ຈັກຫວ່ານ, ຈັກກ່ຽວຫຍ້າໃຫມ່ອ່ຽມ, ຫມູ່ຜູ້ ກະທັ້ງຮອດງົວແມ່, ພວກເຮົາມີງົວແມ່ ມີ ໂຕ, ຄຶດ ເບິ່ງ... ອີກບໍ່ດົນກໍຈະມີນົມສົດດື່ມກັນ!

ນິຄົມຂອງພວກເຮົາ ຟົດຟື້ນມີຊີວິດຊີວາຄຶກຄັກຂຶ້ນນຳການກະສິ ກຳຢ່າງແທ້ຈິງ ມີແຕ່ພວກເດັກນ້ອຍຮ່ຳຮຽນການຊ່າງຝີມືຢູ່ໂຮງຊ່າງ ເທົ່ານັ້ນບໍ່ຮີບຮ້ອນແລ່ນອອກໄປທົ່ງນາ ຢູ່ລົ້ນເດ່ນເບື້ອງຕິດກັບໂຮງ ຕີເຫລັກ ແຊເຣີໃຫ້ເຂົາກໍ່ເຮືອນແກ້ວ ແລ້ວພວກຢູ່ໂຮງຊ່າງໄມ້ກໍ ເຮັດຂອບມາໃສ່, ຢູ່ນິຄົມໃຫມ່ ວຽກງານພວກນີ້ເຕີບໃຫຍ່ຂະ ຫຍາຍໂຕຫລາຍແລ້ວ.

ຂະນະທີ່ຄວາມກະຕືລືລົ້ນຕ່ໍວຽກງານກະສິກຳຂອງພວກເຮົາ ຟຸ່ງ ຕີອົ້ນແຮງທີ່ສຸດ ໃນລະຫວ່າງຕົ້ນເດືອນກຸມພານັ້ນ ກາຣາບານິບ ໄດ້ມາຢ້ຽມຢາມພວກເຮົາຢູ່ນິຄົມ, ພວກເດັກນ້ອຍຕ້ອນຮັບມັນຢ່າງ ຍິນດີ ບາງຄົນກອດຄໍດົມແກ້ມຢ່າງກະຕືລືລົ້ນ ມັນຫລົບຫລີກອອກ ມາໄດ້ໂດຍບໍ່ຍາກປານໃດແລ້ວ ຈຶ່ງມາຫາຂ້າພະເຈົ້າຢູ່ຫ້ອງການ.

- ຂ້ອຍມາຢ້ຽມຢາມເບິ່ງວ່າພວກເຈົ້າຢູ່ກິນກັນແນວໃດ.

ໃບຫນ້າຍິ້ມແຍ້ມແຈ່ມໃສ ສອດສ່ອງເຂົ້າມາໃນຫ້ອງ

ການຂອງຂ້າພະເຈົ້າ, ມີທັງພວກຄູສອນ, ເດັກນ້ອຍ, ແລະຄົນ ຊັກຜ້າ.

-ໂອ່! ເຊມີຍາມາຫນີ້... ຫັ້ນເດ້... ຄັກໃດ໋ເນາະ!

ການຮາບານິບ ຍ່າງເລາະທ່ຽວນຳຫມູ່ຈົນຮອດມື້ແລງ, ມັນໄດ້ ໄປເບິ່ງເຄຫະສະຖານ "ແຕຣແກ" ຈາກນັ້ນ ຈຶ່ງກັບມາຫາຂ້າພະ ເຈົ້າ ທ່າທີຫງ່ອມເຫງົາເສົ້າສ້ອຍລົງ.

-ເອົ້າບັດນີ້ເວົ້າສູ່ກັນຟັງເບິ່ງ... ໂຕເຮັດຫຍັງແດ່?

-ໂອ່... ກະ... ຂ້ອຍຢູ່ກັບພໍ່.

-ແລ້ວມີເຕຍກິນເດ້ ມັນໄປໃສ?

-ໂອ້ຍອັນນີ້ຂ້ອຍບໍ່ສົນດອກ! ຂ້ອຍແຍກທາງກັບມັນແລ້ວ, ຄື ວ່າມັນໄປມິດສະກູພຸ້ນໃດ໋.

-ແລ້ວຢູ່ເຮືອນພໍ່ໂຕຫັ້ນເປັນແນວໃດລະ?

-ໂອ່... ຢູ່ເຮືອນພວກເຮົາຫັ້ນກະຄືເຮືອນຊາວນາທົ່ວໄປຫັ້ນ ແລ້ວ, ພໍ່ຂ້ອຍລາວຍັງແຂງແຮງດີຢູ່, ອ້າຍຂ້ອຍແທ້ຕາຍແລ້ວ...

-ຕາຍແບບໃດ?

-ລາວເປັນທະຫານກອງຫລອນ... ພວກທະຫານຂາວ ຍິງ ລາວຢູ່ກາງກະຫນ່ຳນກາງເມືອງເລີຍ.

-ແລ້ວໂຕຄຶດວ່າ ຊິເຮັດແນວໃດ? ຢູ່ກັບພໍ່ໄປເລີຍຫວະ?

-ບໍ່... ຂ້ອຍບໍ່ຢາກຢູ່ດອກ... ຂ້ອຍຍັງບໍ່ຮູ້ເທື່ອ.

ມັນນັ່ງບຶດໂຕໄປມາທ່າທີລັ່ງເລ ຄາວຫນ້ຳຕຸ໊ດຕັ່ງມາຫາຂ້າພະ ເຈົ້າເວົ້າຂຶ້ນປົກໆໂລດວ່າ:

-ອາມໂຕນ ເຊມືອໂນວິດ... ເຈົ້າຊິວ່າແນວໃດ ຄັນຂ້ອຍ... ເອົ້ຶຊີມາຢູ່ນີ້ຄົນນຳອີກ?

ເຊມີຍາ ເສືອດຕາເບິ່ງຂ້າພະເຈົ້າບາດຫນຶ່ງແລ້ວ ຈຶ່ງກົ້ມຫົວລົງເກືອບຈຸຫົວເຂົ່າ.

ຂ້າພະເຈົ້າຈຶ່ງບອກມັນງ່າຍໆຢ່າງແຈ່ມໃສວ່າ:

-ໂຍ້ວ... ແລ້ວເປັນຫຍັງຈຶ່ງຊິບໍ່ໄດ້ລະ? ໂຕກະຢູ່ເທາະແມ້, ພວກເຮົາທຸກຄົນ ຍິນດີຕ້ອນຮັບ!

ເຊມີຍາ ຄາດລາດລຸກຈາກຕັ່ງ, ທ່າທີຕື່ນເຕັ້ນເຕັ້ນໄປດ້ວຍຄວາມຂົ້ນອົກຂົ້ນໃຈ, ມັນຮ້ອງວ່າ:

-ຂ້ອຍທົນຕໍ່ໄປບໍ່ໄດ້ອີກແລ້ວ... ເຈົ້າເຂົ້າໃຈຕື, ທົນຕໍ່ໄປບໍ່ໄດ້! ທຳອິດກະຄືວ່າພໍຢູ່ ແຕ່ຕໍ່ໆມາຂ້ອຍທົນບໍ່ໄດ້ເລີຍ... ກະມີແຕ່ທຳນີ້ລະ, ຂ້ອຍຢ່າງໄປຢ່າງມາ ຂ້ອຍເຮັດວຽກ ແຕ່ຫລັງຈາກກິນເຂົ້າແລງແລ້ວ ຂ້ອຍຢູ່ບໍ່ເປັນ... ຄິດແລ້ວຈົນຢາກໃຫ້ຊື່ໆນີ້ລະ, ຄືກັບເຈົ້າເວົ້ານັ້ນແລ້ວ ຂ້ອຍຕິດນິຄົມ, ຜູກພັນກັບມັນໂດຍບໍ່ຮູ້ສຶກຕົວ ທຳອິດຂ້ອຍຄຶດວ່າ... ຊ່າງຫົວມັນບໍ່ມີປະໂຫຍດຫຍັງດອກ ແຕ່ຕໍ່ມາ ຂ້ອຍຄຶດວ່າ: ຢ່າ ເປັນແນວໃດກໍເປັນ ຊິກັບຄືນໄປເບິ່ງກ່ອນ ພໍແຕ່ເຫັນກໍຢ່າ... ຈັ່ງຊັ້ນລະຂ້ອຍເລີຍມາ... ໂອ້ຂ້ອຍເຫັນຫຍັງແດ່. ພວກເຈົ້າເຮັດພືດກແທ້ ຈິບອ່ຫລີ... ແລ້ວ... ເຊ ເຮີ... ຫັ້ນກະ ..

-ໂຕກະຢ່າຕື່ນເຕັ້ນພືດກຫລາຍດຸ...! - ຂ້າພະເຈົ້າບອກມັນ - ໂຕຄວນຊິກັບມາໂລດລະບໍ, ເປັນຫຍັງຊິຕ້ອງທໍລະມານຕົນເອງແບບນີ?

- ແມ່ນຢູ່.. ຂ້ອຍກໍຄິດແນວນີ້ລະ ແຕ່ພໍ້ຂ້ອຍຄິດຮອດເລື່ອງ ໂລງເລງ ແນວພວກເຮົາເຮັດໃສ່ເຈົ້າຫັ້ນນ່າ... ຂ້ອຍກໍເລີຍ.... - ມັນຍົກແຂນຂຶ້ນແລ້ວມິດໄປ.

- ເອົາລະ .. ມັນຜ່ານໄປແລ້ວ, ລືມສາ, - ຂ້ານ້ອຍເຈົ້າບອກ ມັນ. ມັນເງີຍຫົວຂຶ້ນຢ່າງລະມັດລະວັງ:

- ບາງທີ .. ເຈົ້າຄິດວ່າຂ້ອຍເສກສັນປັ້ນແຕ່ງເລື່ອງເອົາ. ຄືເຈົ້າວ່ານັ້ນລະ... ບໍ່ເດ... ບໍ່ແມ່ນຈັ່ງຊັ້ນຈັກຫນ້ອຍເລີຍລະ ອ່າ... ຄັນເຈົ້າຮູ້ວ່າຂ້ອຍໄດ້ຮູ້ເຫັນຜ່ານຫຍັງມາແດ່! ເວົ້າກັນແບບຊື່ໆດຸ... ເຈົ້າເຊື່ອຂ້ອຍບໍ?

- ກັນເຊື່ອໂຕແລ້ວ! ຂ້ານ້ອຍເຈົ້າບອກມັນຢ່າງຈິງຈັງ.

- ບໍ... ເວົ້າແທ້ໆນ່າ... ເຈົ້າເຊື່ອຂ້ອຍບໍ?

- ໂອ້ຍ ຈັ່ງແມ່ນໂຕລ່ໍໄລເນາະ! ຂ້ານ້ອຍເຈົ້າເວົ້າທັງຫົວ ຊັ້ນ ໂຕຍັງຄິດວ່າຊິຫວນກັບຄືນທາງເກົ່າຢູ່ຫວະ?

- ເຫັນບໍ... ເຫັນບໍ... ເຈົ້າຍັງບໍ່ເຊື່ອຂ້ອຍຄັກເລີຍ...

- ໂຕະຮັດບໍ່ກ໊ກແລ້ວ ເຊມີຍາເອີ້ຍທີ່ມາກ້ວາມສົນໃຈໃນເລື່ອງ ນີ້... ກັນຫວະກັນເຊື່ອຫມົດທຸກຄົນເລີຍລະພໍພຽງແຕ່ວ່າ ບາງຄົນ ກັນເຊື່ອຫລາຍ ບາງຄົນກັນເຊື່ອຫນ້ອຍ...

- ແລ້ວຂ້ອຍເດ້?

- ຮ້ອຍສ່ວນຮ້ອຍ!

- ໂອ້ຍ ແນວນີ້ຂ້ອຍບໍ່ເຊື່ອເຈົ້າດອກ! - ເຊມີຍາຮ້ອງຢ່າງໂມ ໂຫ.

- ຫນ້າເສຍດາຍ!

-ດີລະ ເຖົ້າຢ່າງໃດ ຂ້ອຍກໍຈະພິສູດໃຫ້ເຈົ້າເຫັນດອກ. ເຊມີ ຍິງຢ່າງກັບອອກໄປຫໍພັກ.

ນັບແຕ່ມື້ທຳອິດ ທີ່ກັບມາ ເຊມີຍິງ ກໍໄດ້ເປັນມືຂວາຂອງ ແຊ ເຣໂລດ, ເບິ່ງອອກບາດດຽວວ່າ ຫມໍນີຍົມຊົມຊອບສະພາບຊີວິດ ຂອງຊາວນາຢ່າງຈະແຈ້ງ. ຮູ້ຈັກຫລາຍອັນຫລາຍແນວກ່ຽວກັບ ວິຊາຊີບນີ້ ແລະມີຫລາຍສິ່ງຫລາຍຢ່າງຝັກຮ້ອນຢູ່ໃນສາຍເລືອດທີ່ ສືບທອດມາແຕ່ບັນພະບຸລຸດຊາວນາແຫ່ງພຽງຂອງຫມໍ. ພ້ອມ ດຽວກັນນີ້. ມັນຍັງຊາບຊຶມຮ່ຳຮຽນເອົາວິທະຍາການກະເສດແບບ ໃຫມ່ ແລະຄວາມສະຫງ່າງາມຂອງວິຊາການນີ້ ຢ່າງຈູບຈ້າວອີກ ດ້ວຍ.

ເຊມີຍິງ ຕິດຕາມການເຮັດວຽກຂອງ ແຊເຣ ດ້ວຍຄວາມອິດ ສາ ທັງພະຍາຍາມສະແດງໃຫ້ອີກຝ່າຍຫນຶ່ງເຫັນວ່າ ເຂົາເອງກໍ ເປັນຄົນປະເພດເມື່ອຍບໍ່ເປັນຄືກັນ ທັງບໍ່ຮູ້ຈັກການພັກຜ່ອນນຳອີກ ຍັງຄົງມີແຕ່ຄວາມງຽບສະຫງົບທ່າທີທຸ່ນທ່ຽງໃນຕົວເອງ ເອດວກ ນິ ໂກລາຍວິດ ແຊເຣ ເທົ່ານັ້ນທີ່ມັນຮ່ຳຮຽນເອົານຳບໍ່ໄດ້ ເພາະມັນ ເອງນັ້ນຍາມໃດກໍຫົນຫວຍດົ້ນດັ່ນດ້ວຍອາລົມຂີ້ໂມໂຫ ຄວາມກະ ຕືລືລົ້ນ ຫລ້ຍອນຄວາມເບີກບານກາຍຂອບເຂດຢູ່ສະເຫມີ.

ອາທິດຫນຶ່ງຜ່ານໄປ ຂ້າພະເຈົ້າເອົ້ນມັນມາຫາ ແລ້ວບອກຢ່າງ ທຳມະດາໆວ່າ:

-ນີ້ແມ່ນຫນັງສືມອບສິດ. ໃຫ້ໂຕໄປເບີກເງິນ ๕๐๐ ຮູບຢູ່ ຄ້ງເງິນ.

ເຊມີຍາ ອ້າປາກຄ້າງ ຕາຕິໂຫລກໂລ້ ໃບຫນ້າເມັ້ນຈືດຄ້າຍ ທາຂີ້ເທົ່າ ມັນເວົ້າໂງ່ງ່ອອກມາວ່າ:

- ຫ5ooo ຮຸບຫລະ? ແລ້ວເຮັດແນວໃດລະ?

- ກະທໍ່ນັ້ນແລ້ວ, ຂ້າພະເຈົ້າບອກມັນ ທັ້ງເສືອດຕາເບ່ິງລົ້ນ ລັກໂຕະເລີຍ, - ເອົາມາໃຫ້ກັນເລີຍ!

- ໃຫ້ຂ້ອຍຂີ້ມ້າໄປຫລະ?

- ກະແທ້ລະບໍ ຈັ່ງໃດກໍເອົາປືນສັ້ນໄປນໍາແດ່ລະ.

ຂ້າພະເຈົ້າຄືນປືນທີ່ຫລ່ຽນລະດູໃບໄມ້ຫລົ່ນແລ້ວນີ້ ດ້ຽອອກ ມາຈາກແອວ ມີເຕຍກືນໃສ່ມືໃຫ້ມັນ, ໃນເລົ່າປືນມີລູກກະສຸນຢູ່ ແລ້ວສາມລູກ, ເຊມີຍາກໍາດ້ານປືນ ທ່າທີ່ງ່ຽເກ້ຍຢູ່ມັນເສືອດຕາເບ່ິງ ດ້ວຍຄວາມບໍ່ແນ່ໃຈ ແລ້ວຈ່ຽຍັດເຂົ້າກ່ຽງສົ່ງແບບປຸບປັບ ບໍ່ປາກເວົ້າ ຫຍັງຕື່ມ ແລ້ວອອກໄປ. ສິບນາທີຕໍ່ມາ ຂ້າພະເຈົ້າ ຈ່ຽໄດ້ຍິນສຽງ ຕີນເຫລັກມ້າກະທົບກ້ອນຫີນປູທາງ. ກາຣາບານົບ ນັ່ງຢູ່ເທິງຫລັງ ມ້າ ມືທັ້ງສອງດ້ຽສາຍບັງຫງົນກໍາລັງຄວບມັນຜ່ານກາຍປ່ອງຢ້ຽມ ຫ້ອງຂອງຂ້າພະເຈົ້າໄປ.

ກ່ອນຕິກຄໍ່າ ເຊມີຍາກັບຄືນມາຫາຂ້າພະເຈົ້າຢູ່ຫ້ອງການ ເຂົ້າ ຢູ່ໃນຊຸດເສື້ອຢ່ານຕີເຫລັກສັ້ນເກ່ຽຫົວເຂົ່າ ແອວກ່ືອຮັດ ເບ່ິງຊ້ຽ ຈ່ອຍຮຸງແຕ່ສະຫງ່າງາມ ແລະວ່ອງໄວກໍເຄ່ັງຂຶມ. ມັນວາງມັດເງິນ ກັບປືນລ້ຽງໃສ່ໂຕະຢ່າງນຶ່ງໆ:

ຂ້າພະເຈົ້າຈັບເອົາມັດເງິນ ແລ້ວກາມມັນດ້ວຍນ້ໍາສຽງທໍາມະດາ ທ່ີສຸດທັ້ງກ້ອຍທໍານອງກໍຂາດອາລົມທັ້ງປວງວ່າ:

- ໂຕນັບເບ່ິງແລ້ວຫລະ?

- ເຈົ້າ, ນັບແລ້ວ.

ຂ້າພະເຈົ້າໂຍນມັດເງິນເຂົ້າໄວ້ໃນລົ້ນຊັກໂຕະແບບບໍ່ເອົາ ຫົວຊາ:

- ຂອບໃຈ, ໂຕໄປກິນເຂົ້າແລງໄດ້ແລ້ວ.

ໂດຍບໍ່ຮູ້ເຫດຮູ້ຜົນນຳມັນ ກາຣາບານິບ ດຶງສາຍແອວມັດເສື້ອຍ່ານຂອງມັນອອກ ເລີ່ມຈາກຊ້າຍຫາຂວາ, ຫັນຟຶດໄປບາດຫນຶ່ງ ຈາກນັ້ນຈຶ່ງເວົ້າຂຶ້ນກ່ອນຈະອອກໄປວ່າ:

- ເຈົ້າ.

ສອງອາທິດຜ່ານໄປ ເມື່ອສອນທາງກັນ ເຊມີຍິງທຳຄວາມເຄົາລົບຂ້າພະເຈົ້າດ້ວຍທ່າທີເຫງົາເມື່ອຍໆຄືກັບວ່າ ມັນບໍ່ສະບາຍໃຈ ເມື່ອພົບຂ້າພະເຈົ້າ.

ມັນຮັບຟັງຄຳສັ່ງຂໍ້ໃຫມ່ຂອງຂ້າພະເຈົ້າ ດ້ວຍທ່າທີເຫງົາເມື່ອຍ ຄືເກົ່າ.

- ໂຕໄປເບີກເງິນ ๘๐๐๐ ຮຸບເດີ.

ມັນແນມເບິ່ງຂ້າພະເຈົ້າຕັ້ງດົນ ແສງຕາແຝງຄວາມໂກດເຄືອງ, ເມື່ອຍັດປືນສັ້ນເຂົ້າກົງແລ້ວມັນຈຶ່ງເວົ້າເນັ້ນສຽງແຕ່ລະຄຳວ່າ:

- ສອງພັນຫວະ? ຄັນຂ້ອຍບໍ່ເອົາເງິນມາສົ່ງເດ້ລະ?

ຂ້າພະເຈົ້າໂດດຈາກຕັ່ງນັ່ງ ທັງກັດແຂ້ວໃສ່ມັນວ່າ:

- ຂໍນຳຢ່າເວົ້າເລື່ອງຕາຍໆຈັ່ງຊີ. ເພິ່ນສັ່ງໃຫ້ນຶ່ງເຮັດຫຍັງ ນຶ່ງ ກໍເຮັດຕາມຄຳສັ່ງຕິ.

ກາຣາບານິບ ຍົກບ່າໃຫລ່ເບື້ອງຫນຶ່ງ ແລ້ວຈົ່ມພຸມໆວ່າ:

- ເອີ... ກະໄດ້.

ເມື່ອເອົາເງິນມາສົ່ງ ມັນຈົ່ນຂ້າພະເຈົ້າວ່າ:

- ນັບແດ່.

- ນັບເຮັດຫຍັງ?

- ນັບເທາະ, ຂ້ອຍຂໍຮ້ອງເຈົ້າ.

- ແຕ່ໂຕນັບແລ້ວ ບໍ່ແມ່ນຫວະ?

- ຫາດານັບຫັ້ນນ່າ.

- ໂຍ້ວ... ເຊົ່າເທາະເວີ້ຍ!

ມັນກຸມຄໍໂຕເອງຄືກັບວ່າມີສິ່ງໃດສິ່ງຫນຶ່ງຍັກຮັດຄໍ ແລ້ວດຶ່ງເສື້ອ ອອກ ແລ້ວເຮັດໂຕໂຫງ້ຍໄປມາ:

- ເຈົ້າ... ເຈົ້າພາໂລຂ້ອຍ! ບໍ່ເຊື່ອດອກວ່າເຈົ້າໄວ້ໃຈຂ້ອຍ! ເປັນໄປບໍ່ໄດ້ດອກ! ເຈົ້າເອງກໍຮູ້ດີແມ່ນບໍ? ມັນບໍ່ຫ່ອນເປັນໄປໄດ້? ເຈົ້າຕ້ຳພາໂລສ່ຽງເບິ່ງ, ຂ້ອຍຮູ້ດີ, ເຈົ້າຕ້ຳເຮັດ...

ມັນຫັນໃຈຫຼຶດຫອບ ແລ້ວນັ່ງເປະລິງຕ່ຳ.

- ກັນເລີຍຕ້ອງຕອບແທນຄ່າບໍລິການຂອງໂຕ ຢ່າງຫນັກຫນ່ວງ ເນາະ! ຂ້າພະເຈົ້າເວົ້າຂົ້ນ.

- ຕອບແທນອັນໃດ? ເຊມີຍິງກາມຄືນຢ່າງໂມໂຫ.

- ກະເຊັ່ນວ່າຕ້ອງອົດທົນ ເບິ່ງອາການປ່ວງຂອງໂຕຫັ້ນຕິ.

ເຊມີຍິງ ຫຍຸ້ມແຂມປ່ອງຍ້ຽມແລ້ວຮ້ອງຄາງວ່າ:

- ອານໂຕນ ເຊມືອໂນວ໊ດ!

- ໂຍ້ວແມ່ນໂຕເປັນຫຍັງເທາະ? ຂ້າພະເຈົ້າກາມສີຍ້ານໆຂົ້ນແດ່.

- ໂອ້... ກ້ຳເຈົ້າຮູ້, ກ້ຳເຈົ້າຮູ້ທ່ຳນັ້ນລະ! ຫວ່າງຄວບມ້າມາ

ທັ້ນຂ້ອຍຄຶດວ່າ ກ້າວ່າພະເຈົ້າໃນໂລກນີ້ມີແທ້ ແລ້ວກ້າຫາກວ່າ ພະເຈົ້າອົງນັ້ນ ສົ່ງຜູ້ໃດຜູ້ຫນຶ່ງມາ... ອອກມາແຕ່ປ່າໂດດມາໃສ່ ຂ້ອຍ... ຮຶ... ໃຫ້ມັນມາຈັກສິບ... ຫລາຍທໍ່ໃດກໍໄດ້... ຂ້ອຍຊິ ຍິງ... ຊິກັດຊິເຮັດທຸກຢ່າງຕາມຫນ້າທີ່... ປານຫມາກະຢ່າ... ຈົນ ກ່ວາເຂົາຊິຂ້າຂ້ອຍຕາຍ.. ເຈົ້າຮູ້ບໍ່ວ່າ ຂ້ອຍຈົນເກືອບໃຫ້ ແລ້ວ ຂ້ອຍກໍຮູ້ຢູ່ເຕັມຫົວໃຈວ່າເວລານັ້ນ ເຈົ້າຢູ່ພຶ້ກໍຄຶດຮຸ່ມໆຢູ່ວ່າ: ມັນຊິ ເອົາເງິນກັບມາບໍ່? ເຈົ້າເອງກໍສ່ຽງຄືກັນແມ່ນບໍ່ລະ?

- ໂຕນີ້ຕະຫລົກສົມຄວນເວ້ີຍ ເຊມີຍາ! ແມ່ນອນວ່າເລື່ອງເງິນ ນີ້ມັນສ່ຽງອັນຕະລາຍຢູ່ສະເຫມີລະ, ກ້າບໍ່ສ່ຽງແດ່ກະບໍ່ສາມາດເອົາ ມັນມາຮອດນີ້ຄົນ. ແຕ່ກັນຈຳຄຶດແນວນີ້ໃດ: ກ້າແມ່ນໂຕໄປເອົາ ມາ, ອັນຕະລາຍຫນ້ອຍກ່ວາ, ໂຕຍັງຫນຸ່ມແຂງແຮງ ຂ້ຶ້ນເກັ່ງ ສາມາດເອົາໂຕ ຫລົບຫລີກຈາກໂຈນຜູ້ຮ້າຍ ບໍ່ວ່າຫນ້າໃດຫນົດ ສ່ວນກັນຫວະ... ຄືຊິກຸກນຳທັນຢ່າງງ່າຍໆເວ້ີຍ.

ເຊມີຍາ ຫລົ່ວຕາລົງເບ້ືອງຫນ້ຶງຢ່າງເບີກບານແຈ່ມໃສ.

- ໂອ່.. ເຈົ້າຕັ້ງຫົວແຫລມແທ້ໆໃດເນາະ ອານໂຕນ ເຊມືອ ໂນວິດ!

- ໂຍ້ວ... ເລື່ອງຫຍັງກັນ ຊິຕ້ອງສະແດງຕົວເປັນຄົນຫົວ ແຫລມລະ? ໂຕຮູ້ແລ້ວບັດນີ້ວ່າ ເພິ່ນເບີກເງິນກັນແນວໃດ ຈັ່ງຊັ້ນ ມອບໃຫ້ໂຕເລີຍ, ນັບແຕ່ນີ້ໄປ ກັນບໍ່ມີຫຍັງຫ່ວງເລີຍ, ກັນຮູ້ວ່າ ໂຕເປັນຄົນຊື່ສັດຈິງໃຈທ່ຳກັນຮຸ້ມາແຕ່ກ່ອນແລ້ວ. ໂຕບໍ່ສົງເກດ ເຫັນແດ່ຫວະ?

- ບໍ່... ຂ້ອຍຄຶດວ່າ ເຈົ້າບໍ່ຮູ້ຈັກເທ່ືອຊັ້ນດອກ, - ເຊມີຍາ

ດອບ, ຫມໍ່ອອກມາຈາກຫ້ອງການທັ້ງຮ້ອງເພງພັ້ນເມືອງອຸກຣາອິນ ເພງຫນຶ່ງອອກມາຫນິດແຮງວ່າ:

ເທິງຈອມເຂົາສູງ ແຫລວບິນເວ່ີນ

ເຊ່ີນຈາກຮັງ, ບິນຂຶ້ນໄປ ບິນຂຶ້ນໄປຢ່າງຊື່ນໃຈ ສະແຫວງຫາ ເຫຍ່ືອໃຫມ່ໃນຂ້າງຫນ້າ.

ບົດທີ ๔๕

ຫລັກວິຊາຄູແບບທະຫານ

ລະດູຫນາວປີ ๑๙๔๗ ເປັນປີແຫ່ງການຄົ້ນພົບວຽກງານຈັດຕັ້ງໃຫມ່ຫລາຍອັນ ເຊ່ິງກາຍເປັນສ່ິງກໍານົດຮູບພາບຂອງຊີວິດໂຮມຫມູ່ຂອງພວກເຮົາເປັນເວລາດົນນານເຕັບ. ການຈັດຕັ້ງທ່ີສໍາຄັນກ່ວາຫມູ່ ແມ່ນລະບົບຈັດເປັນຫມວດກອງ ໂດຍມີນາຍກອງເປັນຫົວຫນ້າ.

ຈົນເ ຖິງປັດຈຸບັນ ທັງນິຄົມກັອກກີ ທັງປະຊາຄົມແຊກຊຶນຊະກີ ແລະນິຄົມອ່ືນໆ ທ່ີມີຢູ່ທົ່ວໄປໃນອຸກຣາອິນກໍລ້ວນແຕ່ຈັດຕັ້ງກັນເປັນກອງ ແລະມີນາຍກອງປະຈໍາແລ້ວ.

ແນ່ນອນວ່າໃນລະຫວ່າງປີ ๑๙๔๗-๔๘ ນັ້ນ ກອງຂອງປະຊາຄົມ ແຊກຊຶນຊະກີ ອາດມີຈຸດຮ່ວມກັນພຽງຫນ້ອຍດຽວເທ່ົານັ້ນ ກັບກອງທໍາອິດຂອງພວກເຮົາ ເຊ່ິງມີ ຊາໂດຣອບ ແລະບູຮູນ ເປັນນາຍກອງ ແຕ່ອົງປະກອບຕົ້ນຕໍບາງຢ່າງໄດ້ເກີດຂຶ້ນແລະຄົງຕິດມາຕັ້ງແຕ່ລະດູຫນາວປີ ๑๙๔๗ ພຸ້ນແລ້ວ. ຫລັກການຂອງລະບົບນ້ີເປັນທ່ີນິຍົມຊົມຊອບກໍແຕ່ເມ່ືອເວລາລ່ວງໄປດົນແລ້ວ ຈົນວ່າກອງ

ພວກເຮົາ ໄດ້ກະທົບສັ່ນໂລກແຫ່ງຫລັກວິຊາຄູລົງດ້ວຍການເຕີບ
ໃຫຍ່ຂະຫຍາຍຕົວແບບບຸກຫນ້າຂອງມັນ ແລະກຸ່ມອາດຍາສຶກກຸ່ມ
ຫນຶ່ງໃນວົງການສຶກສາກໍ່ຖືເອົາເປັນຈຸດຫນຶ່ງສໍາລັບຫົວຂ້ອນ. ເປັນ
ທໍາມະດາຢູ່ວ່າ ໃນເວລານັ້ນ ວຽກງານທັງຫມົດຂອງພວກເຮົາຕ້ອງ
ຖືກເອີ້ນວ່າ "ຫລັກວິຊາຄູແບບທະຫານ", ຄໍາສັບນີ້ຖືໄດ້ວ່າໃຊ້ເພື່ອ
ປະນາມລົງໂທດຫນັກຫນ່ວງແບບຫນຶ່ງ.

ໃນປີ ໑໙໘໙ ນັ້ນ ຍັງບໍ່ມີໃຜເຊື່ອວ່າຢູ່ກາງປ່າພົ້ ສະການສຶກ
ສາອົບຮົມແຫ່ງຫນຶ່ງສໍາຄັນເຕີບໄດ້ກໍ່ຮ່າງສ້າງຕົວຂຶ້ນແລ້ວ ແລະມັນ
ໄດ້ກໍ່ໃຫ້ເກີດມີຄວາມຫລົງໄຫລລືມຕົວມົວເມົາຂຶ້ນແລ້ວ.

ທຸກຢ່າງກໍ່ເນີດຂຶ້ນຈາກອຸບັດເຫດຕາຍໆອັນຫນຶ່ງ.

ຄືດັ່ງທີ່ເປັນມາແຕ່ກ່ອນນັ້ນແລ້ວ, ເພິ່ນອີງໃສ່ຄວາມບຸກບືນ
ຂອງພວກເຮົາຈັ່ງຊັ້ນໃນປີນີ້ ຈົ່ງບໍ່ມີການສົ່ງຟືນມາໃຫ້ພວກເຮົາອີກ.
ເຊັ່ນດຽວກັບປີກາຍ ພວກເຮົາຫາໄມ້ແຫ້ງ ແລະສິ່ງທີ່ເກັບເລັ່ມຈາກ
ປ່າ. ວັດຖຸເຜົາໄຫມ້ຄຸນນະພາບຕໍ່ຈໍານວນທີ່ພວກເຮົາສະສົມໄວ້
ໄດ້ ຕອນລະດູຮ້ອນໃຊ້ມາຮອດເດືອນພະຈິກກໍຫມົດໄປແລ້ວ ຈັ່ງຊັ້ນ
ບັດນີ້ ພວກເຮົາຈຶ່ງຕົກຢູ່ໃນວິກິດການດ້ານວັດຖຸເຜົາໄຫມ້ອີກຄັ້ງ
ຫນຶ່ງ. ເວົ້າແທ້ແລ້ວ ການໄປເກັບຟືນແຫ້ງໃນປ່ານັ້ນທັງຫນັກ
ຫນ່ວງ ແລະຫນ້າເບື່ອຫນ່າຍທີ່ສຸດສໍາລັບພວກເຮົາ. ມັນບໍ່ຍາກຢູ່
ໃນເລື່ອງຕັດນັ້ນດອກ ແຕ່ການເກັບທ້ອນເອົາໄມ້ນັ້ນຕິຂະຫນາດ
໑໐ ຟຸດເທົ່ານັ້ນ ອັນທີ່ພໍເອີ້ນວ່າໄມ້ດອກ, ພວກເຮົາຕ້ອງຍ່າງໄປ
ທົ່ວໆປ່າເປັນຫລາຍໆເຮັກຕາ ບຸກຂຶ້ນເຂົ້າໄປໃນປ່າເລິກ ແລະຕ້ອງໃຊ້
ພະລັງວັງຊາຢ່າງຫລວງຫລາຍ ເພື່ອລາກແກ່ຂົນໄມ້ຫມູ່ນີ້ມາຮອດນິ

ຄົນ. ວຽກງານເຫລົ່ານີ້ທຳລາຍເສື້ອຜ້າ ເຄື່ອງນຸ່ງຂອງກຳເຊົ່າພວກ ເຮົາຂາດເຂີນຢູ່ແຕ່ເກົ່າແລ້ວ ຈັ່ງຊັ້ນສິ່ງທີ່ມາພ້ອມກັບລະດູຫນາວ ຈຶ່ງແມ່ນເດັກນ້ອຍມີຕີນກະແດ້ງ ແລະເລື່ອງຜິດກຽງອັນສ້ຽງສຸດບໍ່ ເປັນຢູ່ຄອກມ້າ. ອານໂຕນບໍ່ຍອມໃຫ້ໃຜເອົາມ້າອອກໄປໃຊ້ວຽກນີ້.

-ພວກເຈົ້າໄປເຮັດເອງ, ຂ້ອຍບໍ່ຍອມໃຫ້ມ້າໄປເຮັດວຽກອັນ ນີ້ດອກ... ເພື່ອໄປແກ່ໄມ້ຊັ້ນຫວາ? ພວກເຈົ້າເຫັນວ່າ ມັນແມ່ນ ໄມ້ຊັ້ນຫວະຫັ້ນ?

-ບຮາເຊັນໂກ, ແຕ່ຈຳເປັນຕ້ອງມີຟືນດັ່ງໃຜເດ້? ນີ້ແມ່ນຄຳ ຖາມຊະນິດຫາຄຳຕອບບໍ່ໄດ້ເຊິ່ງການິນາ ອີວານໂນວິດ ຕັ້ງຂຶ້ນ.

ອານໂຕນ ຕອບໄປທາງຂ້າງທາງຄູວ່າ:

-ກະບໍ່ຕ້ອງດັ່ງຕ່ອງໄພຫັ້ນ, ຂ້ອຍບໍ່ເຫັນວ່າຊິຕ້ອງການມັນ, ເບົ້າຕີຢູ່ຄອກມ້າຫັ້ນບໍ່ເຫັນມີເຕົ່າຝັ່ງ... ພວກເຮົາກໍຍັງຢູ່ກັນໄດ້.

ແມ່ນແຕ່ຕົກຢູ່ໃນສະພາບອັດຕະຄັດແນວນີ້ ອາໄສກອງປະຊຸມ ໃຫຍ່ ພວກເຮົາກໍສາມາດເຮັດໃຫ້ແຊເຣີ ຍອມຫລຸດຜ່ອນການ ໃຊ້ກອງນຂົນຜຸ່ນລົງໃນລະຍະຫນຶ່ງແລ້ວ ລະດົມກຳລັງໄປເກັບຟືນ ໂດຍຄັດເອົາແຕ່ຜູ້ແຂງແຮງແລະມີເກີບດີໃສ່. ຈັ່ງຊັ້ນຈຶ່ງເກີດມີກຸ່ມ ເດັກປະມານ ๔๐ ຄົນ ປະກອບດ້ວຍເດັກນ້ອຍຜູ້ຫ້າວຫັນຂອງ ພວກເຮົາທັງຫມົດເຊັ່ນ ປູຣຸນ, ເບຍລູກິນ, ແວກຊະເນັບ, ໂວໂລ ດອບ, ອິດຊາຈິ, ໂຊບິດ ແລະຜູ້ອື່ນໆອີກ. ພວກເຂົາອອກເດີນ ທາງແຕ່ເຊົ້າມືດ: ເຂົ້າຈີ່ເຕັມກົ່ງສົ້ງກົ່ງເສື້ອ ແລະຢູ່ໃນປ່າຫມົດມື້. ໃນຕອນແລງກະຫນິນປູຫິນຂອງພວກເຮົາ ປະດັບປະດາດ້ວຍກອງ ຟືນງ່າໄມ້ແຫ້ງເປັນຍ່ອມໆ. ອານໂຕນ ຫນ້າບຶ້ງພໍປານໃສ່ຫນ້າ

ກາກຈຳເປັນເອົາມ້າແກ່ກວງນກະແຫະອອກມາແກ່ໄມ້ໄປມ້ຽນ.

ພວກເດັກນ້ອຍກັບຄືນມານິຄົມໃນສະພາບທ້ອງແຫ້ງຫິວໂຫຍ ແຕ່ເບີກບານມີຊີວິດຊີວາ. ຫລາຍຄັ້ງພວກເຂົາກັບມາດ້ວຍການຫລົ້ນເກມປະຫລາດຢ່າງຫນຶ່ງຊຶ່ງເອື້ອຍອີ່ງໃສ່ ພຶດຕິການແບບໂຈລະກຳໃນອະດີດຂອງພວກເຂົາເອງ. ຂະນະທີ່ ອານໂຕນ ກັບເດັກນ້ອຍສອງຄົນ ຊ່ອຍກັນຂົນຟືນແຫ້ງອອກຈາກກວງນນັ້ນ ພວກອື່ນໆ ຍັງຄົງແລ່ນໄລ່ກັນຢູ່ໃນປ່າຕໍ່ໄປ: ເກມຫລົ້ນດັ່ງກ່າວສ້ຽງສຸດລົງດ້ວຍການຕໍ່ສູ້ແລະການຈັບພວກໂຈນໄດ້. "ພວກໂຈນປ່າ" ທີ່ກາຍເປັນຊະເລີຍຖືກຄວບຄຸມຕົວມາຍັງນິຄົມ ໂດຍມີຫນ່ວຍບ້ອງກັນກຶຂວານແລະເລື່ອຍເປັນອາວຸດຕິດຕາມຢ່າງໃກ້ຊິດ. ເຂົາຊຸກ "ພວກໂຈນ" ເຂົ້າມາໃນຫ້ອງການຂອງຂ້າພະເຈົ້າແບບຍອກໃຍແທ້ໆ. ສ່ວນຢູ່ໃນຫ້ອງບາງເວລາມີ ອິດຊາຈິ ຫລື ກໍຣິໂຕ, ທ້າວຫລ້ານີ້ແຕ່ກ່ອນເປັນລູກນ້ອງຂອງພວກໂຈນສາຍ ມາກໂນ* ຈົນເສຍນິ້ວມືໄປນິ້ວຫນຶ່ງຍ້ອນ. ມັນກາມຂ້າພະເຈົ້າແຮງໆແບບຈົ່ມໆວ່າ:

-ຕັດຫົວພວກເຂົາຫລິ້ຍິ່ງເປົ້າ? ພວກນີ້ກຶ!ອາວຸດອາລະວາດຢູ່ເຕັມປ່າ ຄືວ່າຫລາຍແທ້ໆໃດພວກນີ້ນະ.

ການສົນປາກຄວາມເລີ່ມຂຶ້ນ, ໂວໂລດອບຢູ່ຄໍ້ວເຂົ້າແລ້ວສໍ້ສົນເບຍລູກິນວ່າ:

---

* ມາກໂນ ຊື່ຫົວຫນ້າກຸ່ມຜົນປະຕິວັດກຸ່ມຫນຶ່ງ ຊຶ່ງເຄື່ອນໄຫວຢູ່ເຂດອູກຣາອິນ ໃນລະຫວ່າງເກີດສົງຄາມກາງເມືອງ.

- ບອກມາດີໆ. ພວກເຈົ້າມີປືນກົນຢູ່ຈັກບອກ?

ເບຍລຸກົນ ຫົວອັກໆຈົນຫອບ ແລ້ວຖາມວ່າ:

- ແມ່ນອີ່ຫັ້ງ ປືນກົນ? ກົນໄດ້ບໍ່?

- ແມ່ນຫຍັງເກາະ ປືນກົນນ່າ... ອ່າບັກມະຫາໂຈນ.

- ກົນບໍ່ໄດ້ ແມ່ນບໍ່ລະ? ຈັ່ງຊັ້ນຂ້ອຍບໍ່ສົນນຳມັນດອກອັນປືນກົນຫັ້ນ.

ສ່ວນກັບ ເຟໂດເຣັນໂກ ບ່າວນ້ອຍຊົນນະບົດເຕັມຕົວ ນັ້ນກໍຈະຖືກຖາມຂຶ້ນຢ່າງກະທັນຫັນວ່າ:

- ຍອມຮັບສາວ່າ ມຶງເຄີຍໄປຢູ່ກັບມາກໂນ ມາແລ້ວ!

ເຟໂດເຣັນໂກ ເຂົ້າໃຈໄວສົມຄວນ ວ່າຄວນຈະຕອບແນວໃດ ເພື່ອຢູ່ໃນເກມຫລິ້ນຕໍ່:

- ແມ່ນແລ້ວຂ້ອຍເຄີຍໄປຢູ່.

- ແລ້ວມຶງໄປເຮັດຫຍັງຢູ່ນຳເຂົາ?

ຂະນະທີ່ ເຟໂດເຣັນໂກ ຄຶດຫາຄຳຕອບຢູ່ນັ້ນ ໃຜຜູ້ຫນຶ່ງທີ່ຢູ່ຂ້າງຫລັງນັ້ນ ກໍລົມສຽງນັ້ນຕອບແທນເຮັດສຽງແບບຄົນໂງ່ແລະເຫງົານອນວ່າ:

- ຂ້ອຍລ້ຽງງົວ!

ເຟໂດເຣັນໂກ ເສືອກແສງຕາໄປອ້ອມໆກໍພົບແຕ່ໃບຫນ້າຊື່ໆເສີຍໆທັ້ງນັ້ນ ສຽງຫົວແຕກຕື່ນຂຶ້ນ, ເຂົາຕົກຂະມ່າ ລືມເກມຫລິ້ນທີ່ຕົນໄດ້ພະຍາຍາມພໍເຮງແລ້ວເພື່ອເຂົ້າຮ່ວມນຳຫມູ່. ໃນເວລາດຽວກັນນັ້ນເອງບັນຫາໃຫມ່ກໍຫນ້ຳລົງມາອີກວ່າ:

- ແລ້ວເພິ່ນເອົາງົວແມ່ລາກລິດຕັດຊັ່ງກາ* ບໍ່ລະ?

ບັດນີ້ ເຟໂດເຮັນໂກ ບໍ່ເຂົ້າໃຈອັນໃດຫມົດແລ້ວ ເຂົາຈຶ່ງຫາວິທີຫລີກເວັ້ນຕາມແບບເກົ່າວ່າ:

- ໂຍ້ວ... ແມ່ນຫຍັງເກາະ?

ໂກຣິໂຕ ສັງເກດເບິ່ງມັນດ້ວຍທ່າທີໂມໂຫໂຫໂສຂະຫນາດຫນັກ ຈາກນັ້ນ ຈຶ່ງຫັນມາຫາຂ້າພະເຈົ້າ ຊົ່ມຊັບສຽງຫນັກໆວ່າ:

- ເອົາໄປແຂວນຄໍ, ຄົນອຸບາດ... ເບິ່ງແຕ່ຕາຂອງມັນຫັ້ນເດ້!

ຂ້າພະເຈົ້າຕອບຄືນດ້ວຍນ້ຳສຽງດຸງອັນວ່າ:

- ແມ່ນລະ. ມັນບໍ່ສົມຄວນໄດ້ຮັບການໂຍະຍານໃດໆທັ້ງນັ້ນ. ເອົາມັນໄປໂຮງອາຫານເລີຍແລ້ວເບີກອັດຕາກິນໃຫ້ມັນສອງເທົ່າ.

- ໂທດຫນັກຂະຫນາດເລີຍ! - ໂກຣິໂຕຈົ່ມສຽງເປັນຕາຂົນຫົວລຸກ.

ເບຍລູກິນ ເວົ້າຂຶ້ນຢ່າງລ່ຽນໄຫລວ່າ:

- ຄັນຊັ້ນ ເຮົາເອງນີ້ກະແມ່ນໂຈນມະຫາໂຫດຄົນຫນຶ່ງເດ້... ແລ້ວເຮົາເອງກໍເຄີຍໄປລ້ຽງງົວໃຫ້ແມ່ຕູ້ ມາຮູດເຊຍ** ຄືກັນ...

ຮອດນີ້ ເຟໂດເຮັນໂກ ຈຶ່ງຍົ້ມອອກ ແລະງັບປາກທີ່ອ້າເຊ່ເວ

---

* ລິດຕັດຊັ່ງກາ ລິດປືນກົນ ຊຶ່ງຕາມທຳມະດາໃຊ້ມ້າສອງໂຕລາກແກ່, ເພິ່ນໃຊ້ປືນຊະນິດນີ້ທຳການຮົບໃນສະໄຫມສົງຄາມກາງເມືອງ.

** ມາຮູດເຊຍ ຫົວຫນ້າກຸ່ມຜືນປະຕິວັດ, ເປັນແມ່ຍິງໄວຊະລາແລ້ວ.

ລົງ. ພວກເດັກນ້ອຍເລີ່ມແລກປ່ຽນຄວາມຄິດເຫັນກ່ຽວກັບວຽກ
ງານຂອງພວກເຮົາ. ປູຮຸນ ເລົ່າວ່າ:

-ມື້ນີ້ກອງຂອງພວກເຮົາເກັບຟືນໄດ້ ໑໔ ກອງນັດໆບໍ່ຫລຸດ
ລົ້ນນີ້. ພວກເຮົາຮັບປະກັນວ່າຮອດບຸນໂມແລນ ພວກເຮົາຈະເກັບ
ຟືນໃຫ້ໄດ້ ໑ooo ປຸດ, ແລະມັນຈະຕ້ອງໄດ້ແທ້ໆ!

ຄຳວ່າ "ກອງ" ແມ່ນສຳນວນຫນຶ່ງນິຍົມໃຊ້ກັນຫລາຍໃນຍຸກ
ທີ່ກະແສຟອງປະຕິວັດບໍ່ທັນຈັດກັນແຈ່ວກັນຢ່າງສະຫມ່ຳສະເຫມີ
ເຂົ້າໄປຢູ່ນຳກອງພັນ ແລະກອງຮ້ອຍເທື່ອ. ສົງຄາມແບບກອງ
ຫລອນ ເຊິ່ງຍຶດເຍື້ອມາດົນນານໃນເຂດ ອູກຣາອິນ ດຳເນີນສືບຕໍ່
ໄດ້ຍ້ອນກອງຫລອນເທົ່ານັ້ນ ກອງຫນຶ່ງໆອາດມີສະມາຊິກຮອດ
ຫລາຍພັນຄົນ ຫລືຕ່ຳກ່ວາຮ້ອຍຄົນ ແຕ່ລະກອງ ພວກເຂົາມີວິຊາ
ການທະຫານເປັນຂອງໂຕເອງ ແລະມີແກ່ວຫລິບລີ້ຢູ່ໃນປ່າເລິກ
ຂອງໃຜຂອງມັນ.

ເດັກນ້ອຍນິຄົມຂອງພວກເຮົາ ຊຶ່ນຊົມອອນຊອນໃນລັກສະນະ
ເພີ້ນອາລົມຂອງການຕໍ່ສູ້ປະຕິວັດແບບກອງຫລອນ ແລະຂອງການ
ເປັນນັກຮົບ ຍິ່ງກ່ວາຜູ້ໃດຫມົດ. ແມ່ນແຕ່ຜູ້ຖືກໂຊກຊາຕາໂຍນ
ເຂົ້າໄປຢູ່ໃນຄ້າຍສັດຕູຂອງຊົ້ນຊັ້ນເອງກໍຕາມ ພວກເຂົາກໍຍັງພົບວ່າ
ໃນນັ້ນມີສະເຫນ ຊະນິດເພີ້ນອາລົມຄືກັນ ສ່ວນຫລວງຫລາຍແລ້ວ
ພວກເຂົາບໍ່ເຂົ້າໃຈ ແລະບໍ່ເຄີຍຮູ້ຫຍັງມາກ່ອນກ່ຽວກັບທາດແທ້
ຂອງການຕໍ່ສູ້ ແລະຄວາມຂັດແຍ່ງລະຫວ່າງຊົ້ນຊັ້ນ ສິ່ງດັ່ງກ່າວເຮັດ
ໃຫ້ເຂົ້າໃຈວ່າເປັນຫຍັງອຳນາດໂຊວຽດ ຈຶ່ງບໍ່ໄດ້ລົງໂທດຫຍັງ
ພວກເຂົາຫລາຍ ພຽງແຕ່ສົ່ງພວກເຂົາມາໄວ້ນິຄົມລ້ຽງ.

ເກົ່າວ່າກອງທີ່ກຳລັງເກີດຂຶ້ນໃນປ່າຂອງພວກເຮົາມີພຽງເລ່ຍ, ຂວານເປັນເຄື່ອງມືຮັບໃຊ້ແຕ່ນັ້ນ ກໍເຮັດໃຫ້ພວກເດັກນ້ອຍຫວນຄິດເກົ່າກອງທະຫານປະຕິວັດ ເກົ່າແມ່ນວ່າມີຫລາຍຄົນຈະບໍ່ເຄີຍມີໜ້າເຂົ້າຮ່ວມຢູ່ໃນກອງດັ່ງກ່າວກໍຕາມ ແຕ່ພວກເຂົາກໍເຄີຍໄດ້ຍິນໄດ້ຟັງນິທານເລື່ອງລືອັນນີ້ມາແລ້ວ.

ຂ້າພະເຈົ້າບໍ່ຢາກແຊກເຂົ້າໃນເກມທີ່ຢູ່ໃນພາລະເດ່ົາຫລັບເດ່ົາຕື່ນແຫ່ງສັນຊາດຕະຍານປະຕິວັດໃນຕໍ່ພວກເດັກນ້ອຍດອກ. ນັກຂຽນປະເພດປາຍປາກກາປູ້ຂອງຝ່າຍວິຊາຄູ ທີ່ຕຳຫນິວິຈານຫນ່ວຍແຮງງານແລະການເຝິກແອບກາຍແບບທະຫານຂອງພວກເຮົານັ້ນພໍພຽງແຕ່ບໍ່ສາມາດເຂົ້າໃຈວ່າທັງຫມົດນີ້ນັ້ນແມ່ນຫຍັງ. ໃນລະຫວ່າງທີ່ພວກເດັກນ້ອຍພວມຄຶດເກົ່າກອງປະຕິວັດ ດ້ວຍຄວາມທະນົງໃຈ, ແຕ່ພວກນັກຂຽນດັ່ງກ່າວຊ້ຳຜັດ ບໍ່ເຄີຍມີຄວາມຊົງຈຳແບບດຽວກັນນີ້ເລີຍ ເພາະວ່າໃນສະໄຫມເຮັດການປະຕິວັດນັ້ນ, ພວກເຂົາບໍ່ເຄີຍຍົກສູງບົນດາບັກຂຽນທີ່ເຄີຍຮັບໃຊ້ລະບອບພະເຈົ້າຊາ, ພວກເຂົາບໍ່ເຄີຍຫ້ອຊານຳ "ຈິດຕະສາດ" ຂອງພວກເຂົາ ແລະບ້ອລະບັດຮັກສາຊັບສົມບັດຂອງພວກເຮົາ. ກອງທະຫານປະຕິວັດບໍ່ເຄີຍສະອອນນຳພວກນັກຂຽນວ່າພວກເຂົາແມ່ນປັນຍາຊົນ, ນອກຈາກຈະໂອ້ລົມນຳພວກເຂົາດ້ວຍພາສາອາວຸດເທົ່ານັ້ນ.

ແຕ່ບໍ່ມີຫຍັງຊ່ວຍແກ້ໄຂໄດ້ແລ້ວ, ບໍ່ວ່າການຕຳຫນິວິຈານຈະເປັນແບບໃດ ນິຄົມຂອງພວກເຮົາເລີ່ມຈາກການຈັດຫນ່ວຍກອງນີ້ເອງ.

ຢູ່ໃນຫນ່ວຍຫາພົນນີ້ ບູຮູນ ເປັນຜູ້ນຳຫນ້າສະເຫມີ ແລະກໍບໍ່

ມີໃຜຍາດແຍ່ງຕຳແໜ່ງນົກຮຸດອັນນີ້ໄປຈາກຫມໍໄດ້. ອ້າງໃສ່ກົດເກນ ການຫລິ້ນເກມພວກເດັກນ້ອຍ ເລີຍພາກັນເອີ້ນຫມໍວ່າອັດຕະມ້າ.

ຂ້າພະເຈົ້າບອກເຂົາວ່າ:

-ຊ່ຽ ບໍ່ເໝາະສົມດອກ, ມີແຕ່ພວກໂຈນທຳ້ນັ້ນລະທີ່ມີອັດຕະມ້າ.

ພວກເດັກນ້ອຍຄັດຄ້ານວ່າ:

-ເປັນຫຍັງຊິມີແຕ່ພວກໂຈນລະ? ພວກທະຫານກອງຫລອນ ກໍເຄີຍມີຄືກັນ.

-ຢູ່ໃນກອງທັບແດງ ເພິ່ນບໍ່ເອີ້ນອັດຕະມ້າ.

-ຢູ່ໃນກອງທັບແດງ ເພິ່ນເອີ້ນວ່າ ນາຍກອງ, ແຕ່ເຮົາກັບ ກອງທັບແດງມັນປຽບກັນບໍ່ໄດ້.

-ບໍ່ໄກປານໃດດອກ, ເອີ້ນນາຍກອງດີກ່ວາ.

ການຕັດໄມ້ສຳເລັດຮຽບຮ້ອຍໄປແລ້ວ. ມາຮອດວັນທີ ๑ ມ້ຽ ກອນ ພວກເຮົາມີຟືນຫລາຍກ່ວາ ๑๐๐๐ ປຸດ ແຕ່ຫນ່ວຍຂອງ ບູຮູນບໍ່ໄດ້ຍຸບໄປ, ມັນໂອນໄປເປັນຫນ່ວຍປູພື້ນເຮືອນແກ້ວຢູ່ໃນນິຄົມໃຫມ່. ຫນ່ວຍນີ້ອອກປະຕິບັດງານແຕ່ເຊົ້າ, ກິນເຂົ້າຢູ່ນອກ ແລະກັບມາໃນຕອນຄ່ຳ.

ມ້ຫນ້ຳ ຊາໂດຣອບ ຕ້ງຂ້ສ້ງເກດກັບຂ້າພະເຈົ້າວ່າ:

-ບ໋ະ ພວກເຮົາເຮັດກັນແນວໃດເນາະ? ມີຫນ່ວຍຂອງ ບູຮູນ ຫນ່ວຍດຽວ ແລ້ວຜູ້ອື່ນໆເດ້?

ບໍ່ຕ້ອງເສຍເວລາຄຶດດົນດອກ. ມາຮອດເວລານັ້ນ ລະບຽບການ ປະຕິບັດວຽກປະຈຳວັນຢູ່ໃນນິຄົມມີຢູ່ແລ້ວ, ຈ່ຳຊັ້ນ ຈ່ຳມີຄຳສ່ັງຕື່ມ

ຂັ້ນອີກຂັ້ນໜຶ່ງ ຄືກໍ່ຕັ້ງຫນ່ວຍທີສອງຂຶ້ນໂດຍໃຫ້ ຊາໂດຣອບ ເປັນ ນາຍກອງ. ຫນ່ວຍນີ້ມີຫນ້າທີ່ຮັບຜິດຊອບ ວຽກງານຢູ່ໂຮງຊ່າງທັງ ຫມົດ ແລະບູຮູນ ກໍໂຍກຍ້າຍນາຍຊ່າງຝີມືດີເຊັ່ນ ເບຍລູກິນ ແລະ ແວກຊະເນັບມາໃຫ້.

ລະບົບດັ່ງກ່າວ ຂະຫຍາຍຕົວອອກຢ່າງວ່ອງໄວ. ຫນ່ວຍກອງ ທີ ສ ແລະທີ ຄ ກໍາເນີດຂຶ້ນຢູ່ໃນນິຄົມໃຫມ່ໂດຍມີນາຍກອງປະ ຈໍາ. ພວກແມ່ຍິງຕັ້ງເປັນຫນ່ວຍທີ ຄ ໂດຍມີ ອາຊະເຈຍ ນິດ ແຊບນາຢາເປັນນາຍກອງ.

ມາຮອດລະດູບານໃຫມ່ ລະບົບການຈັດຕັ້ງຫນ່ວຍຂອງພວກ ເຮົາກໍມີຮູບແບບສົມບູນກ່ວາຍອນ. ມັນນ້ອຍລົງ ແລະຕອບສະຫນອງ ກັບແນວຄຶດກະຈາຍເດັກນ້ອຍເຂົ້າໃນໂຮງຊ່າງຕ່າງໆ. ຂ້າພະເຈົ້າຈື່ ໄດ້ວ່າ ພວກຊ່າງເກີບມັນຕິດນໍ້າເບີ ๑ ສະເຫມີ ພວກຊ່າງເຫລັກ ຕິດເບີ ຜ, ພວກລ້ຽງມ້າເບີ ๘, ພວກລ້ຽງຫມູ ເບີ ๑๐. ນາຍ ກອງຂອງແຕ່ລະຫນ່ວຍ ນັ້ນແມ່ນຂ້າພະເຈົ້າບົ່ງຕົວເອງ ແຕ່ຕໍ່ມາຂ້າ ພະເຈົ້າມັກຈັດໃຫ້ພວກເຂົາປະຊຸມກັນຫລາຍຂຶ້ນເລື້ອຍໆ ຊົ່ງຕໍ່ມາບໍ່ ດົນພວກເດັກນ້ອຍກໍເລີ່ມຕັ້ງຊື່ໃຫມ່ເພື່ອໃຫ້ມັນເປັນຕາຟັງກ່ວາເກົ່າ ວ່າ "ສະພານາຍກອງ". ບໍ່ດົນຂ້າພະເຈົ້າກໍຊຶມເຄີຍນໍາການອາໄສ ສະພານີ້ສໍາລັບ ຕັດສິນບັນຫາສໍາຄັນທຸກຢ່າງ, ການບົ່ງຊື່ແຕ່ຕັ້ງ ນາຍກອງກໍກາຍມາເປັນວຽກຂອງສະພາເທື່ອລະຂັ້ນ ແລະສະພາເອງ ກໍຮັບສະມາຊິກຕື່ມດ້ວຍວິທີເລືອກຕັ້ງແບບລົງຄະແນນສຽງ, ກະໂຕ ການເລືອກຕັ້ງເອົານາຍກອງແລະການກໍານົດພາລະຫນ້າທີ່ຂອງພວກ ເຂົາເອງນັ້ນ ສໍາເລັດເປັນຄວາມຈິງກໍຕໍ່ເມື່ອດົນນານມານີ້ ແຕ່ຂ້າພະ

ເຈົ້າເອງບໍ່ເຄີຍກ່ວ່າ ການເລືອກຕັ້ງໄດ້ແບບນີ້ແມ່ນສັນຍານຂອງ ຄວາມກ້າວຫນ້າຢ່າງຫນຶ່ງແລະກໍຍືນຢູ່ໃນຈຸດນີ້ຕໍ່ມາ. ການຄັດ ເລືອກນາຍກອງຄົນໃຫມ່ແຕ່ລະຄັ້ງໂດຍສະພານັ້ນ ມັກຕິດຕາມດ້ວຍ ການອະພິປາຍຢ່າງຮອບຄອບສະເຫມີ. ຍ້ອນການເລືອກແບບປ່ອນ ບັດ ພວກເຮົາຈຶ່ງໄດ້ຕັ້ງນາຍກອງຊະນິດດີເລີດແທ້ໆ ພ້ອມດຽວກັນ ນີ້ ສະພານາຍກອງບໍ່ເຄີຍຢຸດຕິກິດຈະກໍາ ແລະຢຸດເຊົາພັກຜ່ອນຈັກ ເທື່ອ.

ກິດລະບຽບສໍາຄັນທີ່ສຸດຂໍ້ຫນຶ່ງທີ່ຍັງຄົງຮັກສາສືບຕໍ່ມາຮອດປັດຈຸ ບັນ ກໍແມ່ນການເກືອດຫ້າມຢ່າງເດັດຂາດໃຫ້ອະພິສິດທຸກຢ່າງແກ່ ນາຍກອງ: ນາຍກອງບໍ່ໄດ້ຮັບຫຍັງພິເສດລື່ນສະມາຊິກທໍາມະດາ ແລະບໍ່ມີການຍົກເວັ້ນວຽກງານໃຫ້ແກ່ເຂົາເລີຍ.

ມາຮອດລະດູຫນາວປີ ໑໙໘໓ ພວກເຮົາກ້າວມາເຖິງຂັ້ນຕອນ ສໍາຄັນທີ່ສຸດສໍາລັບການປັບປຸງລະບົບຈັດກອງ. ມາດຕະການອັນນີ້ ໃນຄວາມຈິງແລ້ວ ມັນເປັນຜົນຂອງການປະຕິດສ້າງຕົ້ນຕໍຂອງການ ດໍາລົງຊີວິດແບບໂຮມຫມູ່ຂອງພວກເຮົາ ຕະຫລອດເວລາ ໑໓ ປີ ໃນປະຫວັດສາດຂອງມັນ. ມີແຕ່ມາຕະການດຽວນີ້ທີ່ນັ້ນທີ່ອໍານວຍ ໃຫ້ກອງຕ່າງໆຂອງພວກເຮົາເຊື່ອມຕິດເປັນອັນຫນຶ່ງອັນດຽວກັນທັງ ແຂງແຮງແລະເປັນເອກະພາບກັນ, ຮູ້ຈັກໄຈ້ແຍກວຽກງານ ແລະ ການຈັດຕັ້ງ, ລະບອບປະຊາທິປະໄຕ ໃນກອງປະຊຸມໃຫຍ່, ການ ຍອມຮັບລະບຽບວິໄນ ແລະການຍອມຂຶ້ນຕໍ່ກັນລະຫວ່າງຫມູ່ເພື່ອນ ກັນເອງ ແຕ່ຢູ່ພາຍໃນຂອບເຂດນີ້ ບໍ່ໄດ້ເກີດມີລະບອບຊຸນນາງຫລື ຊົນຊັ້ນຂອງພວກທີ່ໄດ້ເປັນນາຍກອງ.

ຫົວຄິດປະດິດສ້າງດັ່ງກ່າວ ແມ່ນການຈັດຕັ້ງກອງ "ພິເສດ" ຂອງພວກເຂົານັ້ນເອງ.

ຝ່າຍຄັດຄ້ານລະບົບຂອງພວກເຮົາໂຈມຕີ ອັນທີ່ພວກເຂົາເອີ້ນ ວ່າ "ຫລັກວິຊາຄູແບບທະຫານ" ຢ່າງຮຸນແຮງ ແຕ່ພວກເຂົາບໍ່ ເຄີຍເຫັນນາຍກອງຂອງພວກເຮົາຜູ້ໃດຜູ້ຫນຶ່ງໃນຂະນະທີ່ເຮັດວຽກ ເລີຍ ແຕ່ສິ່ງນີ້ກໍຍັງບໍ່ແມ່ນອັນສຳຄັນກ່ວາຫມູ່ດອກ, ສິ່ງສຳຄັນ ທີ່ສຸດກໍແມ່ນວ່າ ພວກເຂົານັ້ນບໍ່ເຄີຍໄດ້ຍິນໄດ້ຮູ້ເລື່ອງກ່ຽວກັບ ກອງພິເສດເຫລົ່ານີ້ມາກ່ອນຈັກເທື່ອຈັ່ງຊັ້ນ ຈຶ່ງຄິດບໍ່ອອກເລີຍວ່າ ອັນໃດແມ່ນຫລັກການຕົ້ນຕໍຢູ່ໃນລະບົບນີ້.

ກອງພິເສດກໍເກີດຂຶ້ນຍ້ອນວ່າໃນເວລານັ້ນ ພວກເຮົາສຸມ ຈິດໃຈໃສ່ວຽກງານກະສິກຳເປັນຕົ້ນຕໍ, ພວກເຮົາມີພົນທົ່ວໄປຢູ່ເກົ່ງ ກວ ເດເຊຍຕົນ ແລະໃນລະດູຮ້ອນ ແຊເຣີ ກໍຮຽກຮ້ອງໃຫ້ທຸກຜູ້ ທຸກຄົນມາຊ່ວຍກັນ. ເດັກນ້ອຍແຕ່ລະຄົນຍັງຄົງສັງກັດຢູ່ກັບໂຮງ ຊ່າງຫນຶ່ງ ຊຶ່ງເຂົາບໍ່ຢາກຕັດຂາດ, ທຸກຄົນຖືວ່າການກະສິກຳແມ່ນ ວິທີທາງຫນຶ່ງທີ່ຈະຮັບປະກັນຊີວິດການເປັນຢູ່ ທັງບັບປຸງລະດັບມັນ ຂຶ້ນ ສ່ວນໂຮງຊ່າງນັ້ນຊ່ວຍເສີມສ້າງໃຫ້ພວກເຂົາມີອາຊີບຢ່າງ ຫນຶ່ງ. ໃນລະດູຫນາວ ເມື່ອວຽກງານຢູ່ການທົ່ງຫລຸດຜ່ອນລົງ ຫນ້ອຍທີ່ສຸດແລ້ວ ໂຮງຊ່າງທັງຫລາຍກໍແຫນ້ນເຕັມອັດຕາ. ແຕ່ ພໍມາຮອດເດືອນມັງກອນ ແຊເຣີ ກໍເລີ່ມຮຽກຮ້ອງເອົາແຮງງານ ເພື່ອລົງມືເຮັດວຽກຢູ່ໃນເຮືອນແກ້ວ ແລະການສະສົມຝຸ່ນ ວຽກງານ ຂອງລາວ ນັບມື້ນັບມີຫລາຍຂຶ້ນ.

ຍ້ອນວ່າ ວຽກງານກະສິກຳ ຍ້າຍບ່ອນປ່ຽນທີ່ເລື້ອຍໆ ທັງປະ

ເພດຂອງວຽກງານເອງກໍປ່ຽນໄປຈັ່ງຊັ້ນ ມັນຈຶ່ງເຮັດຄົນໂຮມຫມູ່ ຂອງພວກເຮົາກະຈາຍກັນອອກເປັນແບບຕ່າງໆ ຕາມຫນ້າວຽກ. ສິດເດັດຂາດຂອງນາຍກອງໃນຂະນະ ຮັບຜິດຊອບອັນຄົບກ້ວນ ຂອງ ເຂົານັ້ນເອງທີ່ພວກເຮົາເຫັນວ່າ ແມ່ນຈຸດສຳຄັນກ່ວາຫມູ່ຫມົດ ນອກນັ້ນ ແຊເຣີ ກໍຍັງຮຽກຮ້ອງໃຫ້ສະມາຊິກນິຄົມຜູ້ໃດຫນຶ່ງເປັນ ຜູ້ຮັບຜິດຊອບປະຕິບັດລະບຽບວິໄນ, ຕໍ່ການປົກປັກຮັກສາເຄື່ອງມືອຸ ປະກອນ, ການປະຕິບັດວຽກງານ ແລະຄຸນນະພາບຂອງວຽກງານ. ມາຮອດດຽວນີ້ ບໍ່ມີພະນຸດຜູ້ມີສະຕິສຳປັນສັນຍະເຕັມປ່ຽມຄົນໃດ ແລ້ວທີ່ ຄຶດຕ້ານຄັດຄ້ານ ຂໍ້ຮຽກຮ້ອງເຫລົ່ານີ້ເລີຍ ແຕ່ເຖິງ ປານ ນັ້ນຂ້າພະເຈົ້າ ກໍອົດຄຶດບໍ່ໄດ້ວ່າ ອາດຈະມີແຕ່ພວກນັກສຶກສາສາດ ເທົ່ານັ້ນທີ່ເຄີຍຄ້ານ.

ເມື່ອເຂົ້າໃຈເຖິງຄວາມຈຳເປັນຂອງການຈັດຕັ້ງດີແລ້ວ ພວກ ເຮົາຈຶ່ງກ້າວເຖິງການຈັດຕັ້ງກອງພິເສດຂຶ້ນ.

ກອງພິເສດນີ້ເປັນຫນ່ວຍງານຊົ່ວຄາວ ຕັ້ງຂຶ້ນສຳລັບປະຕິບັດ ວຽກໃນໄລຍະບໍ່ກາຍອາທິດຫນຶ່ງ ສຳລັບເຮັດວຽກໃດວຽກຫນຶ່ງໂດຍ ສະເພາະເຊັ່ນການຫລີກຫ້ອມັນຝະລັ່ງໃນທົ່ງໃດທົ່ງຫນຶ່ງ, ການໄຖ ຄາດດິນຕອນຫນຶ່ງ, ຄັດເລືອກເຮັດຄວາມສະອາດແນວປູກ, ຂົນ ຝຸ່ນ, ຫວ່ານແນວປູກແລະອື່ນໆອີກ.

ວຽກງານແຕ່ລະຊະນິດ ຮຽກຮ້ອງໃຫ້ມີຈຳນວນພົນຕ່າງກັນ, ບາງຄັ້ງກໍສອງຄົນ, ຫ້າຄົນຫລືແປດຄົນ. ແລະຕາຕະລາງວຽກງານ ຂອງກອງພິເສດຢູ່ໃນການທົ່ງເອງກໍປ່ຽນແປງໄປນຳຄືກັນ. ໃນລະດູ ຫນາວຂະນະທີ່ພວກເດັກນ້ອຍພາກັນຮຽນຫນັງສືຢູ່ໃນໂຮງຮຽນນັ້ນ

ພວກເຂົາເຮັດວຽກຈົນຮອດເວລາກິນເຂົ້າທ່ຽງ ຫລືຫລັງຈາກນັ້ນ ໂດຍຈັດເປັນສອງພຽນ. ຫລັງຈາກຫມົດສຶກປີຮຽນແລ້ວ ພວກເຮົາຈຶ່ງນຳຫລັກການອອກແຮງງານອັນລະ ຝ ຊົ່ວໂມງມາໃຊ້, ຫມົດທຸກຄົນເຮັດວຽກພ້ອມກັນ ແຕ່ຄວາມຈຳເປັນໃນການໃຊ້ສຶກ ແລະ ເຄື່ອງຈັກທີ່ບໍ່ທັນຄົບຊຸດຂອງພວກເຮົາ ໄດ້ເຮັດໃຫ້ເດັກນ້ອຍສ່ວນຫນຶ່ງ ຕ້ອງເຮັດວຽກແຕ່ ຝ ໂມງເຖິງທ່ຽງ ແລະອີກພວກຫນຶ່ງ ເຮັດວຽກແຕ່ທ່ຽງຫາ ຝ ໂມງແລງ. ບາງເວລາມີວຽກງານຫລາຍ ຈົນເວລາອອກແຮງງານຂອງພວກເຮົາຍືດຍາວອອກຕື່ມ.

ຍ້ອນວຽກງານມີຫລາຍແບບຫລາຍປະເພດແຕກຕ່າງກັນ ແລະ ກຳນົດເວລາປະຕິບັດກໍຕ່າງກັນນັ້ນຈຶ່ງເຮັດໃຫ້ກອງພົນສຶກ ມີອົງປະກອບແປກຕ່າງກັນໄປເລື້ອຍໆ ຈັ່ງຊັ້ນ ຈຶ່ງເກີດມີບັນຊີກອງເຫລົ່ານີ້ ເຊິ່ງເບິ່ງແລ້ວຄ້າຍຄືກັບຕາຕະລາງການແລ່ນລົດໄຟ.

ບັດນີ້ເປັນທີ່ຮູ້ກັນດີໃນທ່ວນິຄົມ ແລ້ວວ່າກອງພົນສຶກເບີ ນ "ສອນ" ເຮັດວຽກຕັ້ງແຕ່ ຊ ໂມງເຊົ້າ ເຖິງບ່າຍສີ່ໂມງແລງ ມີເວລາພັກກິນອາຫານທ່ຽງຢູ່ໃນສອນຕົ້ນໄມ້ຢ່າງເປັນປະຈຳ; ສ່ວນພວກກອງພົນສຶກເບີ ນ "ຜັກ" ນັ້ນຮັບຜິດຊອບສວນຜັກ, ກອງ ນ "ລ້ອມແປງ" ກຳກັບນຳການລ້ອມແປງ, ກອງ ນ "ເຮືອນແກ້ວ" ເຮັດໂຄງຮ່າງເຮືອນແກ້ວ. ກອງພົນສຶກເບີ ๑ ເຮັດວຽກແຕ່ ຝ ໂມງເຊົ້າເຖິງທ່ຽງ, ກອງທີສອງ ເຮັດວຽກແຕ່ທ່ຽງຫາ ຝ ໂມງແລງ. ບໍ່ດົນການຕັ້ງຊື່ກອງເຫລົ່ານີ້ກໍຂຶ້ນຮອດຫມາຍເລກ ๑ນ.

ກອງພົນສຶກເຫລົ່ານີ້ ຈັດຕັ້ງຂຶ້ນເພື່ອວຽກງານໃດຫນຶ່ງໂດຍສະ

ເພາະ ເມື່ອສຳເລັດວຽກງານນັ້ນໆແລ້ວພວກເດັກນ້ອຍກັບເຂົ້ານິຄົມ ກອງພິເສດກໍຍຸບສະຫລາຍໄປພ້ອມ.

ເດັກນ້ອຍແຕ່ລະຄົນ ຮູ້ວ່າຕົນສັງກັດຢູ່ກອງກຳລອນເບີໃດ ມີ ໃຜເປັນນາຍກອງປະຈຳ, ມີຫນ້າທີ່ອັນໃດຢູ່ໃນໂຮງຊ່ຳງໃດ ພ້ອມ ທັງບ່ອນກິນເຂົ້າຢູ່ໃນໂຮງອາຫານ ແລະບ່ອນນອນຢູ່ຫໍພັກນຳ. ກອງ ກຳລອນນີ້ກໍ່ວ່າ ແມ່ນຫນ່ວຍຂັ້ນປະກິນປະການສຳລັບການດຳລົງຊີ ວິດແບບຢູ່ໂຮມຫມູ່ຂອງພວກເຂົາ, ສ່ວນຫົວຫນ້າຂອງພວກເຂົາກໍ ເປັນສະມາຊິກຂອງສະພານາຍກອງຢ່າງອັດຕະໂນມັດ. ພໍແຕ່ພົ້ນລະ ດູບານໃຫມ່ ລ່ວງເຂົ້າສູ່ລະດູຮ້ອນ ໂອກາດທີ່ເດັກນ້ອຍຜູ້ຫນຶ່ງຈະ ຕົກໄປເຮັດວຽກຢູ່ໃນກອງພິເສດ ເພື່ອເຮັດວຽກໃດຫນຶ່ງເປັນເວລາ ຕັ້ງຫລາຍອາທິດກໍ່ຍິ່ງມີຫລາຍຂຶ້ນ. ຢ່າງໃດກໍຕາມ ເຖິງແມ່ນວ່າໃນ ກອງພິເສດຈະມີສະມາຊິກແຕ່ສອງຄົນເທົ່ານັ້ນກໍຕາມ ແຕ່ໃຜຜູ້ຫນຶ່ງ ກໍຕ້ອງເປັນນາຍກອງໂລດ, ເຂົາເປັນຜູ້ຈັດຕັ້ງວຽກງານ ແລະຮັບ ຜິດຊອບໃນວຽກງານ ແຕ່ພໍເວລາອອກແຮງງານສັ້ງສຸດລົງ ກອງພິ ເສດນີ້ກໍຍຸບສະຫລາຍໄປໂລດ.

ກອງພິເສດແຕ່ລະກອງ ຈັດຕັ້ງຂຶ້ນເພື່ອປະຕິບັດງານຕະຫລອດ ເວລາອາທິດຫນຶ່ງ ຍ້ອນແນວນີ້ເດັກນ້ອຍແຕ່ລະຄົນຈຶ່ງປ່ຽນຫນ້າທີ່ ໃຫມ່ໃນອາທິດຕໍ່ໄປ, ໄດ້ຮັບການເຝິກແອບຊ່ຳຄາວແບບໃຫມ່ ເພື່ອເຮັດວຽກງານຊະນິດໃຫມ່ ພາຍໃຕ້ການບັນຊາຂອງນາຍຜູ້ໃຫມ່ ເຊິ່ງກໍໄດ້ຮັບການແຕ່ງຕັ້ງສຳລັບອາທິດຫນຶ່ງຄືກັນ ໂດຍສະເພາະນາຍ ກອງ, ຫລັງຈາກນັ້ນເຂົາກໍ່ກັບລ້ອນໄປຢູ່ໃນກອງໃຫມ່ ແຕ່ບັດ

ນີ້ບໍ່ແມ່ນໃນການະເປັນນາຍກອງອີກແລ້ວ ແຕ່ຫາກເປັນສະມາຊິກ
ທຳມະດາຄົນຫນຶ່ງ.

ສະພານາຍກອງພະຍາຍາມສະເຫນີເພື່ອໃຫ້ເດັກນ້ອຍແຕ່ລະຄົນ
ຮັບຫນ້າທີ່ເປັນນາຍກອງພິເສດນອກຈາກຜູ້ບໍ່ມີຄວາມສາມາດແທ້ໆ
ຈຶ່ງຍົກເວັ້ນໄປ. ເຮັດດັ່ງນີ້ກໍຖືກຕ້ອງດີແລ້ວເພາະວ່ານາຍກອງພິເສດ
ນີ້ແບກຫາບຄວາມຮັບຜິດຊອບແລະຄວາມວິຕົກກັງວົນຈຳນວນຫນຶ່ງ
ນຳ. ອີງໃສ່ຫລັກການນີ້ ເດັກນ້ອຍຂອງພວກເຮົາສ່ວນຫລວງ
ຫລາຍຈຶ່ງບໍ່ພຽງແຕ່ໄດ້ປະກອບສ່ວນເຂົ້າໃນວຽກງານຜະລິດເທົ່ານັ້ນ
ແຕ່ພວກເຂົາຍັງໄດ້ເຂົ້າຮ່ວມໃນຫນ້າທີ່ຈັດຕັ້ງພ້ອມ. ສິ່ງດັ່ງກ່າວນີ້
ສຳຄັນຫລາຍແລະກໍແມ່ນສິ່ງ ທີ່ການສຶກສາອົບຮົມແບບກອມມູນິດ
ຮຽກຮ້ອງຕ້ອງການ. ຍ້ອນແນວນີ້ແລ້ວ ແລະສິ່ງນີ້ກໍເປັນທີ່ປະຈັກ
ຕາແທ້ ທີ່ນິຄົມຂອງພວກເຮົາໄດ້ໂດດເດັ່ນຂຶ້ນຫລາຍໃນປີ ໑໙໔໙,
ຍ້ອນຄວາມສາມາດປັບແປງຕົວໃຫມ່ເລື້ອຍໆ ຂອງພວກເດັກນ້ອຍ
ເພື່ອເຂົ້າກັບທຸກວຽກງານ. ຈັ່ງຊັ້ນແລ້ວຢູ່ໃນການປະຕິບັດພາລະກິດ
ຫລາຍແບບຫລາຍແນວນັ້ນ ພວກເຮົາຈຶ່ງມີທັງນັກຈັດຕັ້ງນັກອອກ
ຫົວຄິດຢ່າງຫລວງຫລາຍ ພວກເຂົາເປັນຜູ້ທີ່ໄວ້ເນື້ອເຊື່ອໃຈໄດ້
ແທ້.

ຕຳແຫນ່ງຂອງນາຍກອງກາວອນ ຫລຸດຜ່ອນຄວາມສຳຄັນລົງ
ຫລາຍທີ່ສຸດ. ພວກນາຍກອງກາວອນເອງບໍ່ຕ້ອງຕົນເປັນຫົວຫນ້າ
ກອງພິເສດຈັກເທື່ອ ທັງນີ້ໂດຍຖືວ່າພວກເຂົາມີວຽກງານທາງອື່ນຢ່ຽ
ຢ່າງລົ້ນມືແລ້ວ. ແຕ່ພວກເຂົາກໍໄປເຮັດວຽກຄຶກັບສະມາຊິກສາມັນ
ຂອງກອງພິເສດຫນຶ່ງໆຕາມຄຳບັນຊາຂອງນາຍກອງຊື່ວຄາວ ເຊິ່ງ

ສ່ວນຫລາຍກໍແມ່ນສະມາຊິກຄົນຫນຶ່ງໃນກອງກຳລັງອອນ ທີ່ເຂົ້າເປັນ ນາຍກອງນັ້ນເອງ. ດັ່ງນັ້ນຈຶ່ງເກີດມີລະບົບການຂົ່ມຕໍ່ກັນເອງແບບ ສັບສົນຢ່າງຫນຶ່ງຢູ່ພາຍໃນນິຄົມ ເຊິ່ງບໍ່ໄຂຊ່ອງທາງໃຫ້ເດັກນ້ອຍຕິ ຕໍ່ອອກຫ່າງຈາກການດຳລົງຊີວິດແບບໂຮມຫມູ່ເພື່ອຄອບຄອງມັນ.

ລະບົບຈັດຕັ້ງກອງພິເສດເຮັດໃຫ້ຊີວິດ ຢູ່ພາຍໃນນິຄົມເຂັ້ມຂຸ້ນ ແລະເປັນຫນ້າສົນໃຈທີ່ສຸດ ຍ້ອນວິທີຈັດຫນ້າທີ່ອອກແຮງງານສັບ ຫວ່າງກັບຫນ້າທີ່ນັກຈັດຕັ້ງ ແລະການມີຫນ້າທີ່ເປັນຜູ້ອອກຄຳສັ່ງ ກັບການຢູ່ພາຍໃຕ້ການບັນຊາຜູ້ອື່ນ, ການປະຕິບັດວຽກງານເປັນ ຫມູ່ຄະນະ ກັບການປະຕິບັດໂດຍບຸກຄົນ.

ບົດທີ ๔๖

ພວກເຜດຊີແຫ່ງນິຄົມໃຫມ່

ພວກເຮົາທຳການສ້ອມແປງເຄຫາສະການ ແຕຣບແກ ມາໄດ້ ສອງປີແລ້ວ ຈົນມາຮອດດຽວນີ້ຄືລະດູບານໃຫມ່ປີ ๑๙๔๖ ພວກ ເຮົາກໍສັງເກດເຫັນວ່າວຽກງານຈຳນວນຫລວງຫລາຍໄດ້ສຳເລັດລົງ ແລ້ວຢ່າງບໍ່ຄາດຄຶດມາກ່ອນ ແລະນິຄົມໃຫມ່ກໍເລີ່ມມີບົດບາດສຳຄັນ ຢູ່ໃນການດຳລົງຄົງຕົວຂອງພວກເຮົາ, ເຊເຣີ ເອງມີສະຫນາມ ເຄື່ອນໄຫວເປັນຂອງຕົນເອງ ຢູ່ຫັ້ນ ລາວມີທັງຄອກມ້າ ຄອກຫມູ ຄອກງົວ. ໃນຕົ້ນລະດູຮ້ອນ ບັນຍາກາດ ບໍ່ຄືເກົ່າມາຫລັງແລ້ວ ຊີ ວິດຟົດຟື້ນດຸເດືອດຂຶ້ນຢ່າງຈົງຈັງ.

ໃນຊ່ວລະຍະຫນຶ່ງອີກ ທີ່ກອງພິເສດຂອງນິຄົມເກົ່າຍັງຄົງເປັນ ກຳລັງດັ້ນຕໍ່ຂອງການດຳລົງຊີວິດໃນຄາວນີ້. ຕະຫລອດມື້ຕະ

ຫລອດເວັ້ນ ຂະບວນເຄື່ອນທີ່ຂອງພວກເຂົາຢຽດຍາຍໄປຕາມເສັ້ນ ທາງຄົດໂຄ້ງ ແລະແຄມທົ່ງນາລະຫວ່າງສອງບ້ານ ພວກຫນຸ່ມ້າວ ຟ້າວອອກໄປສູ່ວຽກງານບ້ານໃຫມ່ ອີກພວກຫນຸ່ມເລັ່ງຍ່າງກັບມາບ້ານເກົ່າເພື່ອກິນເຂົ້າເພນຫລືເຂົ້າແລງ.

ກອງເຮັດວຽກກະຈາຍອອກເປັນແຖວຍາວຢຽດຄອບຄຸມ ລະຍະຍ່າງດ້ວຍບາດກ້າວອ່ອງໄວ. ຄວາມສະຫລຽວສະຫລາດ ແລະຄວາມກ້າຫານຂອງເດັກນ້ອຍບໍ່ຢຸດຢ່ອນຜ່ອນລົງ ເມື່ອພົບກັບອຸປະສັກອັນເກີດຂຶ້ນຈາກສຶກຜົນປະໂຫຍດສ່ວນບຸກຄົນ ແລະຂົງເຂດດິນແດນເອກະເທດ. ໃນຂັ້ນຕົ້ນ ປະຊາຊົນອ້ອມແອ້ມໄດ້ພະຍາຍາມວາງສິ່ງກີດຂວາງບາງຢ່າງ ແຕ່ບໍ່ດົນພວກເຂົາກໍເຂົ້າໃຈວ່າບໍ່ຈຳເປັນ. ດ້ວຍຄວາມຄ່ອງແຄ້ວບໍ່ສະທ້ານຢ້ານກົວຕໍ່ສິ່ງໃດຫມົດ ພວກເດັກນ້ອຍດຳເນີນການປະຕິຮູບເສັ້ນທາງທຸງອັນຄົດໂຄ້ງສັບສົນ ລະຫວ່າງທຸ່ງນາຫນຶ່ງສູ່ທຸ່ງນາໃຫມ່ ແລ້ວດັດແປງແກ້ໄຂມັນຢ່າງດົ້ດົ້ງ ແນໃສ່ໃຫ້ກາຍເປັນເສັ້ນທາງຊື່ລົງທີ່ສຸດ, ເມື່ອ ຫົນທາງເສັ້ນຕົດໃຫມ່ຕົກເຂົ້າໄປໃນເດີ່ນບ້ານຂອງຜູ້ໃດຜູ້ຫນຶ່ງ ວິທີແກ້ແບບໃຊ້ສູດເລຂາຄະນິດກໍຍັງບໍ່ທັນໃຫ້ຫມາກຜົນສົມບູນດອກ ຈຳຕ້ອງມ້າງເພບັດໃຈບາງຢ່າງເສຍກ່ອນເຊັ່ນຫມາ, ຮົ້ວ, ກຳແພງແລະປະຕູໃຫຍ່.

ຫມາເປັນບັດໃຈທີ່ພວກເຮົາແກ້ໄຂໄດ້ງ່າຍກ່ວາຫມູ່ ພວກເຮົາມີເຂົ້າຈີ່ເຫລືອຢູ່ຫລາຍ ແລະເຖິງແມ່ນວ່າບໍ່ມີເຂົ້າຈີ່ກໍຕາມ ພວກຫມາພື້ນບ້ານເຫລົ່ານີ້ສາມາດເຂົ້າແກ້ບເຂົ້າເກຍກັບພວກເດັກນ້ອຍເປັນຢ່າງດີ. ຈາກສະພາບອັນຫນ້າເບື່ອຫນ່າຍຂອງການເປັນຫມາຢູ່ໃນບ້ານນອກຂອກຄາເມ ຂາດຊີວິດຊີວາ ແລະສຽງຫົວສະອົກສະ

ອ້ອຍມາເປັນການດຳລົງຊີວິດທີ່ອຸດົມສົມບູນ ໄປດ້ວຍບົດຮຽນໃຫມ່ໆ ຫນ້າຕື່ນເຕັ້ນໃນທັນທີ: ຜູ້ຄົນຫລາກຫລາຍ, ການສົນທະນາໂອ້ ລົມອັນຫນ້າສົນໃຈ, ໂອກາດແລ່ນຊ່ວງເສັ້ງກັນໂດດໃສ່ກອງເພື່ອງ ທາງຫນ້າ ແລະອັນຍອດກ່ວາຫມູ່ກໍແມ່ນການແລ່ນໂດດນຳຂະບວນ ຢ່າງທີ່ເລັ່ງຝີຕີນຂອງກອງໃດກອງຫນຶ່ງ, ການໄລ່ຄາບໄມ້ໃນມືຂອງ ໃຜຜູ້ຫນຶ່ງເຊິ່ງຈາກນັ້ນ ກໍອາດໄດ້ຮັບຮາງວັນເປັນການກອດຄໍລູບ ຫົວຢ່າງອົບອຸ່ນຮັກແພງ. ແມ່ນແຕ່ພວກຫມາຮ້າຍໆຊະນິດລ່ານໂສ້ ໄວ້ເຝົ້າກຸງນາກໍຍັງປ່ຽນໃຈໂດຍສະເພາະແລ້ວ ເມື່ອສົ່ງຕົ້ນຕໍທີ່ຍິ່ງອະ ເຍົ້າໃຫ້ມັນບຸກແລ່ນໄລ່ຂາດຫາຍໄປ. ນັບແຕ່ຕົ້ນລະດູບານໃຫມ່ມາ ພວກເດັກນ້ອຍບໍ່ນຸ່ງສົ້ງຂາຍາວແລ້ວ, ສົ້ງຂາສັ້ນສະອາດເປັນຫນ້າ ຮັກກ່ວາແລະທັງລາຄາຖືກກ່ວາຫລາຍຕໍ່.

ຍ້ອນຄວາມອະກະຕັນຍູ ບໍ່ປະຕິບັດຕາມຫນ້າທີ່ຂອງຫມາ ພວກ ຊາວບ້ານຈຶ່ງເກີດມີແນວຄິດຈິດໃຈລ່ອຍລາ ເມື່ອຍ່ອນເກົ່ງຂັ້ນຍຸຕິ ລົງຢ່າງຂາດຂັ້ນ ອັນເຮັດໃຫ້ການສ້າງອຸປະສັກ ຂັດຂວາງການຕັດ ທາງທຸລະແບບຊື່ໆລະຫວ່າງນິຄົມກັບນ້ຳຫ້ວຍໂກໂລມາກຂາດປະສິດ ທິຜົນໄປເລີຍ. ທຳອິດພວກເດັກນ້ອຍອາຍຸລະຫວ່າງ ໑໐ ຫາ ໑໗ ປີຫລາຍຄົນເຊັ່ນ ອ້ງກຣີ, ມິຕົກ, ແນດຊີປາກ ແລະ ນິໂກລາ ໄດ້ຫັນມາເຂົ້າຂ້າງພວກເຮົາດ້ວຍຄວາມຫລົງໄຫລ ໃນແບບແຜນດຳ ລົງຊີວິດ ແລະການເຮັດວຽກທີ່ແຝງດ້ວຍລັກສະນະເພີດເພີນອາລົມ ຂອງພວກເຮົາ. ພວກເຂົາໄດ້ຍິນສຽງແກສັນຍານຂອງພວກເຮົາຕັ້ງ ແຕ່ດົນແລ້ວ ແລະຊາບຊຶມໃນສະເຫນ່ອັນອ່ອນຫວານຂອງການດຳ ລົງຊີວິດແບບໂຮມຫມູ່ໃຫຍ່ໆຢ່າງເບີກບານແນວນີ້, ບັດນີ້ໃນເມື່ອ

ເກີດມີສັນຍານກິດຈະກຳມະນຸດຊາດ ອັນເຫນືອກວ່າຂອງພວກເຮົາ ເຊັ່ນ "ກອງພິເສດ", "ພວກນາຍກອງ" ແລະອັນເດັ່ນກ່ວາຫມູ່ກໍ ແມ່ນບິດລາຍງານ, ພວກເຂົາກໍ່ຍິ່ງພາກັນອອນຊອນຈົນປາກບໍ່ໄດ້. ພວກຜູ້ໃຫຍ່ສົນໃຈໃນວິທີການອັນທັນສະໄຫມ ຂອງວຽກງານກະສິ ກຳ. "ລະບົບໄກຮູດຂອງແຮກລັນ" ບໍ່ພຽງແຕ່ດຶງດູດຈິດໃຈພວກ ເຂົາໃຫ້ຫຍັບເຂົ້າໃກ້ເດັກນ້ອຍນິຄົມພວກເຮົາເທົ່ານັ້ນ ແຕ່ຍັງຫຍັບ ເຂົ້າໃກ້ທ່ານາ ແລະຈັກຫວ່ານຂອງພວກເຮົານຳອີກ. ນັບແຕ່ນັ້ນ ມາ ມັນກາຍເປັນປະເພນີຢ່າງຫນຶ່ງທີ່ເດັກນ້ອຍແຕ່ລະຄົນໃນກອງພິ ເສດເກີດເປັນສ່ຽວເກີກັບເດັກນ້ອຍໃຫບ້ານໃກ້ຄຽງ, ຊຶ່ງມັກຕິດ ຕາມພວກເຂົາໄປເຮັດວຽກໂດຍໄດ້ນຳເອົາຊ້ວານ ຫລືສຽມທີ່ພວກ ເຂົາໄດ້ລັກເອົາຢູ່ໃນສາງຂອງພວກພໍ່ແມ່ໄປພ້ອມ. ໃນຕອນຄ່ຳກໍ ເຊັ່ນດຽວກັນ ພວກເດັກເຫລົ່ານີ້ມາອ້ອຍອໍຢູ່ໃນນິຄົມພວກເຮົາ ແລະ ໃນຂັ້ນຕ່ຳມາ ໂດຍບໍ່ຮູ້ສຶກຕົວພວກເຂົາໄດ້ກາຍເປັນຄົນເຕ່ຍ່ອງປະກອບ ອັນຈຳເປັນຕ່ອນຫນຶ່ງຂອງພວກເຮົາໄປແລ້ວ. ດວງຕາທ້າງຄູ່ຂອງ ແຕ່ລະຄົນສາຍແສງໃຫ້ຮູ້ວ່າ ການໄດ້ເຂົ້າເປັນສະມາຊິກນິຄົມນັ້ນ ແມ່ນຄວາມຝັນອັນຫນຶ່ງໃນຊີວິດຂອງພວກເຂົາ. ຫລາຍຄົນປະສົບ ຄວາມສຳເລັດໂດຍແຍກຕົວອອກຈາກການຈ່ອງດຶງຂອງພໍ່ແມ່ ຍ້ອນ ຄວາມຂັດແຍ່ງພາຍໃນຄອບຄົວ ທາງດ້ານແນວຄິດຫລືຄວາມເຊື່ອ ຖືທາງດ້ານສາດສະຫນາ.

ເຫດຜົນອັນສຸດທ້າຍກ່ຽວກັບສະພາບຈິດໃຈລ່ອຍລາເມື່ອຍອ່ອນ ຂອງພວກຊາວນາ ກໍແມ່ນອັນທີ່ຮຸນແຮງກ່ວາຫມູ່ໃນໂລກນັ້ນ ຄື: ພວກລູກສາວຫລານສາວຂອງເຂົາເຈົ້າບໍ່ສາມາດອົດກັ້ນຄວາມ

ນິຍົມຊົມຊື່ນຕໍ່ສະມາຊິກນິຄົມຜູ້ໃສ່ສົ້ງຂາສັ້ນ ນຸ່ງເຄື່ອງສະອາດ ທ່າ
ທີເບີກບານແຈ່ມໃສ ແລະມີກິລິຍາມາລະຍາດຈົບງາມເຫລົ່ານີ້ເລີຍ.
ພວກຜູ້ບ່າວຊາວບ້ານ ບໍ່ສາມາດຫາຫຍັງມາຂົ່ມຂູ່ຜາບແພ້ສະເຫນ
ອັນນີ້ເລີຍ ຍົ້ງໄປກ່ວານີ້ພວກເດັກນ້ອຍນິຄົມເອງຊໍ້າບໍ່ສະແຫວງຫາ
ໂອກາດເອົາປຽບພວກສາວນ້ອຍບໍລິສຸດໄຮ້ຜູ້ປົກປ້ອງຮັກສາເຫລົ່ານີ້
ເລີຍ. ພວກເຂົາບໍ່ເອົາກຳປັ້ນຟາດຫລັງພວກນາງ, ບໍ່ແຕະຕ້ອງຈຸດ
ໃດຈຸດຫນຶ່ງໃນຮ່າງກາຍຂອງນາງເລີຍ ບໍ່ວ່າຈະຢູ່ສະຖານທີ່ໃດ ເຊິ່ງ
ອາດຈະນິຄົນເຫັນຫລືບໍ່ນິໃຜຮູ້ເຫັນນຳ. ເບິ່ງນັ້ນນັກຮຽນຮຸ່ນເກົ່າ
ຂອງພວກເຮົາກຳລັງກະກຽມຈະໄປເຂົ້າມະຫາວິທະຍາໄລກຳມະກອນ
ແລະເຂົ້າເປັນສະມາຊິກຊາວຫນຸ່ມກົມໂຊໂມນ ພວກເຂົາເລີ່ມຮູ້ຈັກ
ພໍໃຈໃນຄວາມອ່ອນລະມຸນແຫ່ງມາລະຍາດອັນງາມ ແລະການໂອ້ລົມ
ສົນທະນາອັນຫນ້າສົນໃຈແລ້ວ.

ໃນເວລານັ້ນ ຄວາມເຫັນອົກເຫັນໃຈຈາກຝ່າຍຍິງຄຸ້ມໂຮງນາ
ບໍ່ທັນມີທ່າທີວ່າຈະເປັນຄວາມຮັກແບບຊູ້ສາວເທື່ອ. ພວກສາວ
ນ້ອຍຫມູ່ນີ້ກໍ່ຕ້ອງຄ່ອງກັນດີກັບສາວນ້ອຍໃນນິຄົມພວກເຮົາຄືກັນ,
ພວກນີ້ສະຫລຽວສະຫລາດກ່ວາເປັນສາວໃນເມືອງ ແຕ່ໃນ
ເວລາດຽວກັນຊໍ້າບໍ່ມີທ່າທີຄືສາວຊຸນນາງຈັກດີ. ເລື່ອງຄວາມຮັກອັນ
ສັບສົນເກີດຂຶ້ນຕໍ່ມາພາຍຫລັງພີ້. ໃນປາງນັ້ນ ພວກສາວນ້ອຍທັ້ງ
ຫລາຍຈົ່ງບໍ່ໄດ້ສະແຫວງຫາແຕ່ການນັດຫມາຍ ແລະອອກທ່ຽວຟັ້ງ
ເພງໃນທຳມະຊາດເທົ່ານັ້ນ ນອກນັ້ນພວກເຂົາຍັງສົນໃຈຊອກຫາຄຸນ
ຄ່າທາງດ້ານສັງຄົມ. ພວກເຂົາມາຢູ່ນຳພວກເຮົາເປັນກຸ່ມເລັກກຸ່ມ
ນ້ອຍເລື້ອຍໆ. ພວກນາງຍັງກົວຢ້ານບໍ່ກ້າສ່ຽງເຂົ້າມານິຄົມພຽງຜູ້

ດງວ. ຂະນະທີ່ນັ່ງລົມແກ່ວກັນຢູ່ເທິງແປ້ນໝ້າພໍປານຫ໋ວຜັກບົ່ວ ແຫ້ງນັ້ນ ພວກນາງຊຶມຊາບຮອງຮັບຄວາມປະທັບໃຈແບບໃຫມ່ຢ່າງ ບໍ່ໃຫ້ຕົກເຮ່ຍເສຍຫາຍພໍເມັດ.

ອາໄສຄວາມເຫັນອົກເຫັນໃຈຂອງຊາວຫນຸ່ມຮຸ່ນໃຫມ່ ຕໍ່ພາລະ ກິດຂອງພວກເຮົາ, ຮົ້ວ, ກຳແພງຝາປະຕູທ້ຳຫລາຍຈົ່ງບໍ່ສາມາດ ຮັບໃຊ້ເຈົ້າຂອງມັນຄືແຕ່ເກົ່າມາຫລັງ ດ້ວຍການເປັນຕົວຢັ້ງຢືນການ ລະເມີດກຳມະສິດສ່ວນຕົວ. ຜົນຂອງມັນກໍຄືພວກເດັກນ້ອຍອາດ ຫານຊານໄຊເກີ່ງກັບລົງມືເຮັດ "ຂີ່ຂ້າມຮົ້ວ" ໃສ່ບ່ອນຂ້າມທີ່ກັນ ດານກ່ອນຫມູ. ປາກົດວ່າເທົ່າທີ່ຜ່ານມານັ້ນ ໃນແຖບອື່ນໆຂອງປະ ເທດລັດເຊຍ ຍັງບໍ່ເຄີຍຮູ້ຈັກຄວາມກ້າວຫນ້າແບບນີ້ເທື່ອ ໂດຍສະ ເພາະໃນເລື່ອງເສັ້ນທາງຄົມມະນາຄົມເຊັ່ນການ ເອົາໄມ້ແປ້ນແຜ່ນ ຫນຶ່ງກາດຂ້າມຮົ້ວ ແລ້ວຕອກຫລັກຄ້ຳທ້າງສອງສົ້ນຊື່ໆ.

ຈຳຕ້ອງຍອມຮັບຄືກັນວ່າ ການຕັດທາງສາຍໂກໂລນາກ - ນິ ຄົມແບບຊ່ຳຈັດນັ້ນໄດ້ດຳເນີນໄປແລ້ວເກີ່ງວ່າ ຈະສ້າງຄວາມເສຍຫາຍ ໃຫ້ແກ່ດິນປູກຝັ່ງທີ່ຫວ່ານແນວປູກໃສ່ແລ້ວກໍຕາມ. ແຕ່ເກີ່ງຢ່າງ ນັ້ນມາຮອດລະດູບານໃຫມ່ປີ ໑໙໔໙ ທາງເສັ້ນນີ້ກໍພໍນັບເຂົ້າເປັນ ຄູ່ແຂ່ງຂັນຂອງທາງລົດໄຟສາຍມົດສະກູເລນິນກຣາດ. ຈັ່ງຊັ້ນນັ້ນ ຈຶ່ງເຮັດໃຫ້ວຽກງານຂອງກອງພົນເສດຂອງພວກເຮົາຫລຸດຜ່ອນ ລົງ ຫລາຍ.

ຕອນທ່ຽງ ກອງພົນເສດໄດ້ຮັບສິດພົນເສດກັບກ່ອນຫມູ, ເວລາ ທ່ຽງກັບຊາວນາທີ ພວກເຂົາກິນແລ້ວຮຽບຮ້ອຍ ແລະກຽມຕົວອອກ ເດີນທາງທັນທີ. ຄູເຝິກປະຈຳລັນຂອງນິຄົມ ມອບເຈ້ຍແຜ່ນຫນຶ່ງ

ໃຫ້ພວກເຂົາໃນນັ້ນ ມີຄຳແນະນຳອັນຈຳເປັນທຸກຢ່າງເຊັ່ນວ່າ: ນ້ຳ ເບີກອງ, ລາຍຊື່ສະມາຊິກ, ຊື່ນາຍກອງ, ວຽກງານທີ່ຕ້ອງເຮັດ ແລະກຳນົດເວລາທີ່ຕ້ອງເຮັດໃຫ້ແລ້ວ, ແລ້ວ ນຳເອົາຫລັກການ ຄະນິດສາດອັນແນ່ນອນເຂົ້າມາໃຊ້ໃນກິດຈະການນີ້ແລ້ວ.

ກອງພິເສດອອກເດີນທາງໃນທັນທີ ແລະຫລັງຈາກນັ້ນບໍ່ພໍ ໕-໗ ນາທີກໍຈະແນມເຫັນ ແກວຄົນຍ່າງຂ້າມທົ່ງລິບໆ, ນັ້ນຜູ້ ຫນຶ່ງກຳລັງໂດດຂ້າມຮົ້ວ ແລະລັບຫາຍບ້ານເຮືອນໄປ, ຕິດຕາມພວກ ເຂົາໄປໃນຊ່ວງເວລາພໍເວົ້າລົມກັບນາຍເວນປະຈຳອັນສຸດ-ແມ່ນກອງ ພິເສດ "ສວນ" -໗ ຫລື-໗ "ນັ່ນຝະລັ່ງ". ບໍ່ດົນແກວຍ່າງເດັກ ນ້ອຍກອງຕ່າງໆຂອງພວກເຮົາກໍກະຈາຍກັນອອກຕັດທົ່ງນາ ຫລຽວ ເບິ່ງເປັນຕາຫນ້ອງແລະແລ້ວ ໂຕສະກາ ເຊິ່ງນັ່ງຢູ່ເທິງຫລັງຄາ ສາງ ເຢັນນັ່ງນອາຫານກໍຮ້ອງຂຶ້ນດ້ວຍສຽງແຈ່ມໃສວ່າ:

-ກອງ "ບ"-໑ ກັບມາແລ້ວ!

ຄວາມຈິງກໍເປັນເຊັ່ນນັ້ນແທ້, ກອງ "ບ"-໑ ປາກົດຕົວຂຶ້ນ ເທິງເສັ້ນທາງຄົດໂຄ້ງ ອ້ອມຮົ້ວເຮືອນໄມ້ແລ້ວ. ກອງນີ້ ນັກເຮັດ ວຽກຄາດໄກ ແລະຫວ່ານແນວປູກສະເຫມີ, ຫມາຍຄວາມວ່າວຽກ ງານທີ່ຕ້ອງໃຊ້ແຮງມ້າເຂົ້າຊ່ວຍນັ້ນແລ້ວ. ພວກເຂົາອອກໄປແຕ່ ๕ ໂມງ ๐ ໂດຍມີເບຍລຸກືນ ເປັນນາຍກອງແລະໂຕສະກາຜູ້ນັ່ງຢູ່ ເທິງຫລັງຄາ ກໍແນມເຫັນຜູ້ນີ້ແລ້ວກ່ອນຫມູ່. ບໍ່ພໍເທົ່າໃດນາທີຕໍ່ ມາ ກອງ "ບ"-໑ ເຊິ່ງມີສະມາຊິກຢູ່ ๗ ຄົນ ກໍເຂົ້າມາຮອດເດີ່ນ ນິຄົມ ຂະນະທີ່ພັກພວກຂອງເຂົາ ພາກັນນັ່ງອ້ອມໂຕະທີ່ຕັ້ງຢູ່ເດີ່ນ ກາງປ່າພຸ້ນ; ເບຍລຸກືນກໍມາລາຍງານສະພາບຕໍ່ນາຍເວນປະຈຳວັນ.

ໂຮດີນຊຶກ ບັນທຶກເວລາມາເຖິງຂອງພວກເຂົາ ແລະວຽກງານທີ່ພວກເຂົາເຮັດສຳເລັດ.

ເບຍລູກີນ ນັ້ນຍາມໃດກໍແຈ່ມໃສເບີກບານສະເຫມີ:

-ພວກເຂົາມາຊ້າໄປ ๕ ນາທີ, ເຈົ້າຮູ້ບໍ່ວ່າແມ່ນຄວາມຜິດຂອງພວກຂັບເຮືອ, ພວກເຮົາຕ້ອງໃຊ້ເຮືອບັກເພື່ອຂ້າມຟາກໄປເຮັດວຽກ ແຕ່ມີເຕຍ ບໍ່ຍອມ ມັນເອົາພວກນັກສ່ຽງໄພຂ້າມໄປກ່ອນ.

-ນັກສ່ຽງໄພທາງໃດ? -ນາຍເວນປະຈຳວັນຖາມດ້ວຍຄວາມສອດຮູ້ສອດເຫັນ.

-ຊັ້ນເຈົ້າບໍ່ຮູ້ຈັກຫວະ? ກະພວກເຂົາມາຂໍເຊົ່າສວນຫັ້ນເດ້!

-ເອີ ແລ້ວເປັນແນວໃດລະ?

-ໂຍ້ວ ເຮົາກະບໍ່ປ່ອຍໃຫ້ພວກມັນທັນໄດ້ອອກກາງຝັ່ງລະບໍ, ຮ້ອງໃສ່ໂລດວ່າ: "ພວກເຈົ້າຄຶດວ່າແນວໃດຮຶ? ຊິໃຫ້ພວກເຮົາແນມເບິ່ງພວກເຈົ້າເກັບຫມາກໂປມຍັດເຂົ້າປາກເສຍມັ່ງຢູ່ຫວະ? ກັບເຂົ້າໄປດຽວນີ້! ອ່າ ສະບາຍດີ ອານໂຕນ ເຊມີອໂນວິດ, ວຽກງານເປັນແນວໃດແດ່?

-ສຳບາຍດີ ມັດເວີຍ?

-ເວົ້າກັນຊື່ໆເທາະ ປານໃດຊຶກອນເກົ້າ ໂຮດີນຊຶກອອກຫນີຈາກພຸ້ນເກາະ? ອານໂຕນ ເຊມີອໂນວິດ ເຈົ້າຮູ້ບໍ່ວ່າລາວບໍ່ເປັນທ່າເລີຍໃດ. ເຈົ້າຮູ້ບໍ່ວ່າ ການມີຄົນປະເພດນີ້ເລາະລ່ອງຢູ່ໃນນິຄົມມັນເຮັດໃຫ້ເສຍແນວຄິດຊື່ໆ ບໍ່ມີໃຜຢາກເຮັດວຽກຮ່ວມກັບລາວ

ແລ້ວຂ້ອຍຍັງຊິຕ້ອງໃຫ້ລາວເຊັນຮັບຮູ້ລາຍງານ ນຳອີກຊັ້ນຫວະ? ມັນມີປະໂຫຍດຮ່ອມໃດ?

ເດັກນ້ອຍສ່ວນຫລາຍກຸງດຊັ່ງເບື່ອຫນ່າຍ ທ້າວ ໂຮດົມຊຶກຢ່າງເລິກເຊິ່ງ ປາງນັ້ນຢູ່ບ້ານໃຫມ່ມີເດັກນ້ອຍໄປຢູ່ແລ້ວຕັ້ງ ๔๐ ກ່ວາຄົນ ມີວຸງກເຮັດກ້ວມຫົວຟຸ້ນລະ. ແຊເຣີເອງ ກໍ່ກັບວຸງການໃນທີ່ງນາເທົ່ານັ້ນ ໂດຍມີເດັກນ້ອຍຈາກກອງພົເສດບ້ານເກົ່າມາຊ່ວຍ. ສ່ວນຄອກມ້າຄອກງົວຄອກຫມູເຊິ່ງນັບມື້ນັບຂະຫຍາຍຕົວອອກນັ້ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງພວກທີ່ຢູ່ກັບບ່ອນ. ການກາກກາງບົວລະບັດຕົ້ນໄມ້ກົນຫມາກໃນສວນຮຸງກຮ້ອງເອົາແຮງງານໄປຫລາຍ ສວນນີ້ກວ້າງຮອດ ๔ ເດເຊຍຕົນອຸດົມໄປດ້ວຍຕົ້ນໄມ້ນ້ອຍໆແນວດີ່ງຫລາຍອັນ, ມີການໄຖປັ້ນດິນທົ່ວສວນ ຮອນ່ຳໄມ້, ສະສາງແນວຂຶ້ງດເຮ່ຍອອກ ແລ້ວຕັດຫົນທາງນ້ອຍຜ່ານໄປມາຫລາຍເສັ້ນ ກຳນົດເຂດຫນາມປູກດອກໄມ້. ໃນລະດູບານໃຫມ່ປີນີ້ ເຮືອນແກ້ວຫລັງໃຫມ່ກໍ່ເລີ່ມໃຫ້ຫມາກໄມ້ຊຸດທຳອິດແລ້ວ, ວຸງກຫນັກແມ່ນຢູ່ຕາມແຄມຝັ່ງນ້ຳຫ້ວຍ ມີທັງການບ້ານດູແລະກາງຜືອອກນຳ.

ການສ້ອມແປງເຄຫະສະກ່ານດຳເນີນມາເຖິງບັ້ນສຸດທ້າຍແລ້ວ. ຄອກມ້າເອງ ເຊິ່ງກໍ່ສ້າງດ້ວຍເບຕົ້ງນັ້ນກໍ່ບໍ່ອວດ ຮູບພາບອັນຫນ້າຄັນແຂ້ວຕໍ່ໄປແລ້ວ, ມາຮອດດຸງວນີ້ ຈາກຫລັງຄາຮົ່ວທີ່ກຶກລະເບີດເພີ່ນເອົາສັງກະສີຢາງມາມຸງແທນ ແລະພາຍໃນຄອກ ພວກຊ່າງໄມ້ກໍ່ໄດ້ຍ້າຍຮາງມາໃຫ້ຫມູນ້ອຍ. ຕາມການຄິດໄລ່ຂອງ ແຊເຣີ ນັ້ນ ຄອກນີ້ສາມາດໃສ່ຫມູໄດ້ຮອດ ๑๕๐ ໂຕ.

ການດຳລົງຊີວິດຢູ່ນິຄົມໃຫມ່ບໍ່ມີຫຍັງຫນ້າຕື່ນເຕັ້ນເລີຍ ໂດຍ ສະເພາະໃນລະດູຫນາວ. ພວກເຮົາເກີດມາກັບເຮືອນຕຶກເກົ່າ, ທຸກ ສິ່ງທຸກຢ່າງຢູ່ກຶກບ່ອນກຶກທີ່ຂອງມັນດີຫລາຍຈົນວ່າ ພວກເຮົາເບິ່ງ ຂ້າມສີເຫງົ້າເສົ້າຂອງເຮືອນຕຶກດູບຫມູບ ເຊິ່ງຂາດຄວາມສວຍງາມ ແລະຄວາມສົມສ່ວນຄ່ອງຕົວທຸກຢ່າງນັ້ນເສຍ. ລະບົບແບບເລກຄະນິດ, ຄວາມສະອາດ, ການກະກຽມທຸກຢ່າງ ແບບລະອຽດລະອໍແມ່ນແຕ່ ສຳລັບສິ່ງເລັກໆນ້ອຍກໍຕາມ, ທັງຫມົດເຫລົ່ານີ້ແມ່ນຄວາມສວຍ ງາມຂອງມັນ.

ນິຄົມໃຫມ່ນັ້ນເຖິງວ່າຕັ້ງຢູ່ບ່ອນມີທິວທັດສວຍງາມຕາມຝັ່ງ ໂຄ້ງ ຂອງທ້ວຍ ໂກໂລນາກ ມີຕາຝັ່ງສູງຊັນມີສວນຕົ້ນໄມ້ກົມຫນາກ ແລະເຮືອນຕຶກທີ່ງາມກ້ວາງໃຫຍ່ກໍຕາມ ແຕ່ທັງຫມົດຊ້ຳຄືກັບຫາກໍ ບຸຫນັ້ນອອກຈາກເສດສະຫລັກຫັກພັງທີ່ລັບສົນສົມຄວນ, ທຸກແຫ່ງ ຫີນຮົກເຮ້ຍ ໄປດ້ວຍຂຸມປູນ ເສດອິດດິນແຕກຫຍ້າຮ້າຍປົ່ງ ຊອນ ແຊມຂຶ້ນຫນາຈົນບາງຄັ້ງ ຂ້າພະເຈົ້າອົດຄຶດບໍ່ໄດ້ວ່າ "ນີ້ພວກເຮົາ ຈະສາມາດເອົາຊະນະມັນໄດ້ບໍ?"

ບໍ່ທັນມີຫຍັງຮຽບຮ້ອຍ ເພື່ອຕ້ອນຮັບການດຳລົງຊີວິດເລີຍ: ຫໍພັກດີສົມຄວນ ແຕ່ຊ້ຳບໍ່ມີໂຮງອາຫານ ແລະຮອດເຮືອນຄົວເອງ ກໍຍັງບໍ່ມີຄັກນ. ເມື່ອພວກເຮົາໄປຈັດເຮືອນຄົວໄດ້ແລ້ວ ຊ້ຳພັດບໍ່ມີ ທ້ອງໃຕ້ດິນມ້ຽນເຄື່ອງ. ອັນຮ້າຍແຮງກ່ວາຫມູ່ ແມ່ນບັນຫາພະນັກ ງານ. ພວກເຮົາບໍ່ມີຄົນປະເພດຊ່າງຄຶດຊ່າງເຮັດຈັກຄົນສຳລັບໄປຢູ່ ນິຄົມໃຫມ່.

ສະພາບການເຫລົ່ານີ້ ເຮັດໃຫ້ພວກເດັກນ້ອຍເຊິ່ງໄດ້ສຳເລັດ

ພາລະກິດອັນຍິ່ງໃຫຍ່ໃນການຟື້ນຟູສະພາບນິຄົມໃຫມ່ຄືນມາໄດ້ດ້ວຍ ຄວາມຫ້າວຫັນລືມຕົວນັ້ນ ຕ້ອງບໍ່ຢາກຢູ່ໃນສະຖານທີ່ນີ້. ບຣາເຊັນ ໂກຜູ້ກຽມພ້ອມສະເຫມີທີ່ຈະຍ່າງຮອດມື້ລະ ๔๐ ກ່ວາຫລັກ ເພື່ອ ທຽວໄປທຽວມາລະຫວ່າງ ນິຄົມເກົ່າຫານິຄົມໃຫມ່, ຍິນດີອຶດຫິວ ບໍ່ໄດ້ກິນອີ່ມກິນເຕັມ ແລະອຶດນອນ ແຕ່ຫມໍຍືນເດັດດ່ຽວວ່າເປັນ ການເສື່ອມເສຍກຽດຢ່າງແຮງຖ້າກຶກລົ້ງໄປຢູ່ນິຄົມໃຫມ່. ແມ່ນແຕ່ ຄົນຄືອິດຊາຈິ ກໍຍັງເວົ້າວ່າ:

-ໃຫ້ຂ້ອຍຫນີຈາກນິຄົມຍັງຊິດີກ່ວາໃຫ້ໄປຢູ່ "ແຕຣບແກ".

ໃນເບົານັ້ນ ລັກສະນະດີເດັ່ນທັງຫມົດທີ່ຝັງຕົວຢູ່ໃນນິຄົມເກົ່າ ໄດ້ສ້າງເດັກນ້ອຍໃຫ້ເປັນກຸ່ມສະຫນິດກັນແຫນ້ນແຟ້ນ ເຖິງຂັ້ນວ່າ ຖ້າຢາກແຍກຜູ້ໃດຜູ້ຫນຶ່ງອອກມາ ກໍຕ້ອງໃຊ້ມາດຕະການເດັດດ່ຽວ ແທ້ໆ. ການສົ່ງເດັກນ້ອຍເຫລົ່ານີ້ ອອກໄປຢູ່ນິຄົມໃຫມ່ ຈຶ່ງເປັນຄື ກັບການສ່ຽງທີ່ຈະສູນເສຍທັງສໍາລັບກະໂຕນິຄົມ ແລະລັກສະນະສະ ເພາະຂອງພວກເຂົາເອງ, ພວກເຂົາເອງຮູ້ແລະເຂົ້າໃຈເລື່ອງເຫລົ່ານີ້ດີ, ກາຣາບານິບຈິນເວົ້າວ່າ:

-ຢູ່ຫນີ້ພວກເຮົາໂລດເປັນຄືມ້ານ້ອຍໂຕກ້າຫານຸຫນັ່ນ, ເບິ່ງ ແຕ່ຫມໍບູຮູນຫັ້ນເທາະ ພຽງແຕ່ວ່າໃຊ້ມັນໃຫ້ຖືກທໍ່ນັ້ນລະ...ດີດລົ້ນ ບາດຽວ ມັນກະຊິແລ່ນຫນ້າເປີດ ລາກລົດຄືມ້າໄປຢ່າງຄໍາຮູ້ຄໍາຊຽງ ແຕ່ຖ້າຫາກວ່າໄປປ່ອຍໃຫ້ມັນຈັດການທຸກຢ່າງເອງກໍມີຫ ວ້ອງຫຸ່ນອັບ ຍັບຕ່ວ ທ້ວມັນທ້ວກວຽນຫັ້ນນະ!

ຍ້ອນແນວນີ້ ຢູ່ນິຄົມໃຫມ່ຟື້ນຮູບແບບການດໍາລົງຊີວິດຮ່ວມ ຫມູ່ອີກຢ່າງຫນຶ່ງຈຶ່ງກໍ່ຕົວຂຶ້ນ, ມັນແຕກຕ່າງທັງດ້ານສີສັນແລະຄຸນ

ຄ່າ. ຜູ້ທີ່ເຂົ້າເປັນສະມາຊິກ ແມ່ນພວກເດັກນ້ອຍປະເພດທີ່ບໍ່ດີ ເດັ່ນທ້າບໍ່ຫ້າວັນປານໃດ ແລະກໍບໍ່ແມ່ນພວກມີນິໄສຍາກໂພດ ເກີນໄປ. ເມື່ອເບິ່ງປຽບໃສ່ການຢູ່ໂຮມຫມູ່ເອງແລ້ວ ນິຄົມນີ້ຍັງ ແຂງດ້ານບໍ່ສຸກອມພຽງພໍເທື່ອ ສິ່ງດ່ຳກ່ວາເປັນຜົນຈາກການເລືອກ ເຟັ້ນຕາມຫລັກການວິຊາຄູ.

ພວກເດັກນ້ອຍທີ່ມີບຸກຄະລິກລັກສະນະດຶງດູດໃຈ ບ້າງເອີນຕົກໄປຢູ່ ທີ່ນັ້ນ ໄດ້ຟົ້ນໂພ້ຂຶ້ນຈາກຫມູ່ເດັກນ້ອຍຫລີ້ວ່ຳຢ່າງຫນ້ຳກໍແມ່ນໂປ ໂລອອກມາຢ່າງກະທັນຫັນ ທ່ານກາງພວກເດັກນ້ອຍມາໃຫມ່ ແຕ່ ໃນຄາວນັ້ນ ພວກເຂົາເຫລົ່ານີ້ຍັງບໍ່ໄດ້ຫລໍ່ຫລອມເຝິກຝົນຕົນເອງ ແລ້ວພາກັນຈົມຢູ່ໃນກຸ່ມມິວມຸນຂອງ "ພວກແຕຣບແກ" ໄປເລີຍ.

ເບິ່ງທ່ວງໄປແລ້ວ ພວກສະມາຊິກ "ແຕຣບແກ" ນັບມື້ນັບສະ ແດງຕົວໃຫ້ພວກເຮົາຄືທ້າຂ້າພະເຈົ້າເອງກັບທ້າພວກຄູສອນ ຮູ້ສຶກ ທ້ໍຖ້ອຍ ຫມິດຫວ້ງຫລາຍຂຶ້ນ: ພວກເຂົາຂີ້ຄ້ານມັກງ່າຍ ເປັນ ຫນ້າຂົ້ດງດ ທ້າງມືທ່າອ່ຽງເປີດແປນໄປນິຍົມຊົມຊອບອະບາຍມຸກ ຢ່າງຫນ້ຳເຊັ່ນການຂໍທານ. ທ້າງຫມິດແນມເບິ່ງນິຄົມເກົ່າດ້ວຍຄວາມ ອິດສາ, ຊຸ່ມຊັ້ນກັນລັບໆ ບໍ່ເລີກບໍ່ແລ້ວເປັນອ່ຳຢູ່ນິຄົມເກົ່ານີ້ໄດ້ກິນ ຫຍ້ງແດ່ໃນຄາບເຂົ້າເຊົ້າ ສວາຍ, ມີອາຫານພິເສດອັນໃດແດ່ມ້ຽນ ຢູ່ໃນຫ້ອງໃຕ້ດິນ ແລະແມ່ນຍ້ອນຫຍ້ງ ອາຫານພວກນີ້ຈ່ຳບໍ່ຮອດ ປາກຮອດທ້ອງຂອງພວກເຂົາ. ຍ້ອນບໍ່ສາມາດມາຕໍ່ວ່າຕໍ່ຂານແບບ ຈີ່ຈ້ງກັບພວກເຮົາໂດຍກົງໄດ້ ພວກເຂົາຈ່ຳຊຸ້ມຊຸ່ມກັນຢູ່ເປັນຫມູ່ ໃຜຫມູ່ລາວ ຕາມຈອກແຈຕ່ຳງໆ ແລະຂ້ຽວເຂັ້ນສະມາຊິກຕິວແທນ ຂອງພວກເຮົາເກ່ືອເລ່ືອຂ້ຽກຮ້ອງອັນຫນ້າຂົ້ດງດຂອງພວກເຂົາ.

ເດັກນ້ອຍຂອງພວກເຮົາເກີດມີທ່າທີຫມິ່ນປະຫມາດ ພວກຢູ່ແຕຣບແກ ແບບໃດແບບຫນຶ່ງ ແລ້ວບາງເທື່ອ ຊາໂດຣອບ ຫລື ໂວໂລຄອບ ພາພວກຂີ້ຝ້ອງຂີ້ໂຍ່ຍຈຳນວນຫນຶ່ງມາຍັງນິຄົມເກົ່າ. ຊຸກຫົວພວກເຂົາເຂົ້າໄປໃນເຮືອນຄົວແລະເວົ້າກັບແມ່ຄົວພໍ່ຄົວວ່າ:

- ເອົາອີ່ຫຍັງໃຫ້ພວກຜີຕາຍອຶດ ຫມູ່ນີ້ກິນແດ່!

ຈະດ້ວຍຄວາມອວດອົ່ງທະນົງຕົວແບບຈອມປອມ ຫລືແນວໃດກໍແລ້ວ, "ພວກຜີຕາຍອຶດ" ທີ່ວ່າພາກັນປະຕິເສດສິ່ງທີ່ເພິ່ນຫາໃຫ້ຕາມທຳນຽມ. ເວົ້າກັນຕາມຄວາມຈິງແລ້ວ ພວກເດັກນ້ອຍຢູ່ນິຄົມໃຫມ່ພຸ້ນໄດ້ຢູ່ດີກິນດີກ່ວາພວກເຮົາອີກ, ສວນຜັກຢູ່ໃກ້ໆກັບພວກເຂົາແລ້ວ ຍັງສາມາດອອກໄປຊອກຊື້ຊອກຫາເຄື່ອງເລັກໆນ້ອຍໆຢູ່ໂຮງສີອີກ ພວກເຂົາຍັງມີງົວນົມອີກຫລາຍໂຕ. ການຂົນສົ່ງນ້ຳນົມມາຍັງນິຄົມເກົ່ານັ້ນຫຍຸ້ງຍາກສົມຄວນ ຫົນທາງໄກ ແລະບໍ່ມີມ້າທຽມກອງນ.

ກຸ່ມເດັກນ້ອຍທີ່ດຳລົງຊີວິດຮ່ວມກັນຢູ່ນິຄົມໃຫມ່ນີ້ ເປັນກຸ່ມຂີ້ຄ້ານຂີ້ໂຍ່ຍທີ່ສຸດ ຄືດັ່ງໄດ້ເວົ້າມາແຕ່ກ່ອນນັ້ນແລ້ວ ສະພາບການຫລາຍອັນອຳນວຍໃຫ້ເປັນແນວນີ້ ແຕ່ອັນສຳຄັນກ່ວາຫມູ່ຫມົດ ກໍແມ່ນການຂາດແຄນແລະຄວາມໄຮ້ສະມັດຖະພາບຂອງພວກຄູສອນ.

ພວກຄູສອນບໍ່ຢາກມາເຮັດວຽກກັບພວກເຮົາ ເພາະມີເງິນເດືອນຫນ້ອຍ ແລະວຽກງານຫຍຸ້ງຍາກ. ພະແນກສຶກສາປະຊາຊົນສົ່ງຄົນທີ່ຕົກໄປໃສ່ມືພວກເພິ່ນຢ່າງບັງເອີນມາໃຫ້ພວກເຂົາຄື ໂຮດິນຊິກຕໍ່ມາແມ່ນ ເດຮູດເຊັນໂກ. ພວກເຂົາມາຮອດພ້ອມໆກັບເມຍແລະລູກ ແລ້ວເຂົ້າຄອບຄອງເຮືອນຫ້ອງພັກບ່ອນດີກ່ວາຫມູ່ຢູ່

ໃນນິຄົມ. ຂ້າພະເຈົ້າບໍ່ຄັດຄ້ານແຕ່ປະການໃດ ໄດ້ ແຕ່ຄຶດຂອບໃຈທີ່ ເພິ່ນສົ່ງພວກເຂົາມາໃຫ້.

ເບິ່ງບາດນຶ່ງກໍຮູ້ໂລດວ່າ ເດຮູດເຊັນໂກ ນັ້ນເປັນຄົນນິຍົມ ເປດລູຣາ*. ເຂົາຕິເຮັດບໍ່ຮູ້ຈັກພາສາລັດເຊຍ, ຈັດການປະດັບປະ ດາຫ້ອງຕ່າງໆຂອງນິຄົມດ້ວຍຮູບພາບ ເຊັບເຊັນໂກ** ຊະນິດລາຄາ ຖືກໆ ແລ້ວສຸມຈິດໃຈໃສ່ແຕ່ສິ່ງຫນຶ່ງສິ່ງນຶ່ງທີ່ເຂົາສາມາດເຮັດໄດ້ ຄືຮ້ອງເພງຂອງຊາວ ອຸກຣາອິນ.

ເດຮູດເຊັນໂກ ຍັງຫນຸ່ມແຫນ້ນຢູ່. ໃບຫນ້າຄ່ອງໍ້ໂຄ້ງໄປ ຫນິດຄ້າຍຄື ບ່າວອັນຕະພານໃນຊຸດເຄື່ອງນຸ່ງພື້ນເມືອງອຸກຣາອິນ: ຫນວດຂອງເຂົາ ໂຄ້ງງຸດເປັນລອນ, ຜົມງຸດຍັກເປັນຝອຍງໍ່ໆແລະ ແມ່ນແຕ່ການະວັດນັດຄໍເສື້ອ ເຂົ້າຊຸດ ເຊິ່ງເຮັດດ້ວຍຜ້າແພບາງ ພັນອ້ອມຄໍເສື້ອແລ່ວຕາມແບບອຸກຣາອິນ ກໍຍັກງຸດໄປນໍາເກົ່ງຢ່າງ ນັ້ນກໍຕາມ ຊາຍຄົນນີ້ ກໍຍັງຕ້ອງປະຕິບັດຫນ້າທີ່ອັນຕໍ່າຕ້ອຍເຊິ່ງບໍ່ມີ ຫຍັງໃກ້ຄຽງກັບຄວາມຍິ່ງໃຫຍ່ແຫ່ງເຊື້ອຊາດອຸກຣາອິນ ເລີຍ ນັ້ນ ຄືເຮັດຫນ້າທີ່ເວນຍາມໃນເວລາກາງເວັນຢູ່ນິຄົມ, ເບິ່ງແຍງຄອກ ຫມູ, ບັນທຶກເວລາ ທີ່ກອງພົນເສດຕ່າງໆເດີນທາງມາຮອດແລະໃນ ມື້ທີ່ເຂົາອອກປະຕິບັດວຽກເອງ ເຂົາກໍເຮັດຄຽງບ່າຄຽງໄຫລ່ກັບ

ເປດລູຣາ* ຫົວຫນ້າກອງທັບທະຫານຂາວທີ່ອຸກຣາອິນ, ເຂົາ ເປັນນັກຊາດນິຍົມ ແລະຢາກຈັດຕັ້ງລັດເອກະລາດຢູ່ ອຸກຣາອິນ.

ເຊັບເຊັນໂກ** ນັກກະວີແລະຈິດຕະກອນ ທີ່ຍິ່ງໃຫຍ່ຂອງອຸກ ຣາອິນ ໃນສັດຕະວັດ ທີ ໑໙.

ພວກເດັກນ້ອຍ. ສຳລັບເຂົາແລ້ວ ມັນແມ່ນວຽກງານໄຮ້ປະໂຫຍດ ໄຮ້ສາລະທັ້ງຫມົດ ຕະຫລອດທັ້ງກະໂຕນີຄົມເອງກໍເປັນຄືປາກົດ ການອັນໄຮ້ຫວັ່ງຢ່າງຫນ້ຳ ຊ້ຳບໍ່ມີຫຍັງພົວພັນກັບບັນຫາໃດໃນໂລກ ນີ້.

ໂຣດົມຊິກເອງ ມີປະໂຫຍດສຳລັບນີຄົມເທົ່າໆກັບ ເດຮູດເຊັນ ໂກ ແຕ່ເພິ່ນນີ້ຍັງເປັນຫນ້າອະເຫຍື້ອງກ່ວາ.

ຄົນຜູ້ນີ້ມີອາຍຸປະມານສາມສິບປີ ເຄີຍຜ່ານວຽກງານມາຫລາຍ ບ່ອນຫລາຍແຫ່ງແລ້ວ: ຕຳຫລວດຍຸຕິທຳ, ສະຫະກອນ, ທາງ ລົດໄຟ ແລະບ່ອນສຸດທ້າຍແມ່ນບ່ອນເຝິກອົບຮົມຊາວຫນຸ່ມຢູ່ຄ້າຍ ເດັກ. ໃບຫນ້າຂອງເຂົາ ມີຮູບຊົງປະຫລາດເຫັນແລ້ວພາໃຫ້ຄຶດ ເຫັນກົ້ງໃສ່ເງິນອັດເກົ່າໆ ທີ່ຂາດສ້ອຍ ແລະແປແຟບ. ທຸກພາກ ສ່ວນເທິງໃບຫນ້າຂອງລາວ ລ້ວນແຕ່ຍັບຍໍ່ຄ້າຍມີຫນັງສີແດງຫ່ຳ ຫຸ້ມຢູ່: ສັນດັງອ່າວເປ ແລະງໍ້ງົ້ງລົງທາງຂ້າງ, ໃບຫູແປຕິດຂະ ຫນັບຄືຮອຍພັບອ່ອນເອ້ເລ້ປາສະຈາກຊີວິດຊີວາ, ປາກແຫກ ກ້ວາງນັ້ນແດງກ່ຳຄືເປັນຮອຍແຕກແລະຂາດແຫວ່ງ ຢູ່ທົ່ວທີບຍ້ອນ ຄວາມບໍ່ເອົາໃຈໃສ່ຂອງຜູ້ເປັນເຈົ້າຂອງມາເປັນເວລາຊ້ານານ.

ພໍມາຮອດນີຄົມພ້ອມດ້ວຍຄອບຄົວ ເຂົາກໍເຂົ້າໄປຢູ່ໃນຫ້ອງ ພັກເຊົ່າຫາກໍແປງແລ້ວຫ້ອງຫນຶ່ງ, ໂຣດົມຊິກ ເຮັດວຽກຢູ່ປະມານ ອາທິດຫນຶ່ງ ຫລັງຈາກນັ້ນ ກໍຫາຍໂຕໄປທັນທີໂດຍປະເຈ້ຍນ້ອຍ ບອກຄອບຂ້າພະເຈົ້າວ່າ ເຂົາຂາດໄປ ເພື່ອເຮັດວຽກງານສຳຄັນ ທີ່ສຸດຢ່າງຫນຶ່ງ. ສາມມື້ຕໍ່ມາ ເຂົາກໍມາກັບກອງນກະແຫະຂອງຊາວ ນາ ພ້ອມທັງມີວິແມ່ໂຕຫນຶ່ງມັດຈ່ອງມາພ້ອມ. ໂຣດົມຊິກ ສັ່ງໃຫ້

ເດັກນ້ອຍເອົາງົວມາໄວ້ຮ່ວມກັບງົວຂອງສ່ວນໂຮມ. ແຊເຣີເອງຮູ້ສຶກຕົກຕະລຶງຕໍ່ເຫດການທີ່ບໍ່ຄາດຝັນອັນນີ້.

ສອງມື້ຕໍ່ມາ ໂຣດິນຊຶກ ກໍແລ່ນຕາເຫລືອກມາຫາ ຂ້າພະເຈົ້າ ເພື່ອຟ້ອງຮ້ອງວ່າ:

-ຂ້ອຍບໍ່ຄຶດຈັກຫນ້ອຍວ່າຢູ່ຫນີ້ ເພິ່ນຊິເຮັດກັບພະນັກງານ ແບບນີ້! ເຂົາພາກັນລືມໄປແລ້ວຕີວ່າ ມັນບໍ່ແມ່ນລະບອບເກົ່າແລ້ວ. ພວກເຮົາຫມົດທຸກຄົນ, ລູກຂ້ອຍກັບຂ້ອຍເອງກໍມີສິດໄດ້ຮັບນ້ໍ ນົມຄືກັບຜູ້ອື່ນໆ. ໃນເມື່ອຂ້ອຍເອງ ເປັນຜູ້ອອກຫົວຄຶດປະດິດ ສ້າງຊ້ໍາ, ໂດຍບໍ່ລໍ້າໃຫ້ທາງບໍລິຫານ ເບີກນ້ໍານົມໃຫ້, ຂ້ອຍໄດ້ ອຸດສາພະຍາຍາມ ເຮັດເອງຫມົດ...ຄືເຈົ້າຮູ້ນັ້ນລະ, ຂ້ອຍໄດ້ຊື້ງົວ ແມ່ມາໂຕຫນຶ່ງ...ເງິນກ້ອນສຸດທ້າຍເລີຍລະ, ຂ້ອຍພາມັນມາຮອດ ນີ້ຄົນເອງ, ເຈົ້າຊິສາມາດສະຫລຸບໄດ້ຢູ່ດອກວ່ານັ້ນແມ່ນສິ່ງທີ່ຄວນ ສົ່ງເສີມ ແລະບໍ່ວ່າໃນກໍລະນີໃດຫມົດ ບໍ່ແມ່ນຊິມາບີບບັງຄັບແມ່ນບໍ່ ລະ ແຕ່ວ່າງົວຂ້ອຍເປັນແນວໃດວ່າຕໍ? ນີ້ຄົນມີເພື່ອງແທ້ງ ຕັ້ງວ່າ ທໍ່ໃດກອງ, ນອກຈາກນີ້ ນີ້ຄົນຍັງຊິແກບຊິຮໍາຈັກແມ່ນຫຍັງຕໍ່ຫຍັງ ມາແຕ່ໂຮງສີດ້ວຍລາຄາຖືກໆອີກ. ງົວຫມົດທຸກໂຕໄດ້ກິນອາຫານ ອີ່ມດີພັ້ນ ສ່ວນວ່າງົວຂ້ອຍຊ້ໍາພັດບໍ່ໄດ້ກິນ ແລ້ວພວກເດັກຍັງມາ ຕອບຂ້ອຍດ້ວຍຄວາມເວົ້າແຂງໆວ່າ: ສົມມຸດວ່າ ຜູ້ໃດໆກະມີງົວ ຂອງໂຕເອງເດ້? ຄອກສັດໂຕອື່ນໆ ສະອາດຮຽບຮ້ອຍ ແຕ່ບັດງົວ ຂ້ອຍຊ້ໍາບໍ່ມີໃຜມາປັດກວາດຄອກໃຫ້ມັນຈັກເທື່ອ. ຕັ້ງ ๕ ມື້ແລ້ວ ເດ້ ຈັ່ງຊັ້ນກໍເລີຍເປັນອັນວ່າ ເມຍຂ້ອຍຊິຕ້ອງໄປປັດກວາດຄອກ ງົວເອົາເອງ ລາວກໍວ່າຈະໄປເຮັດຢູ່ດອກ ແຕ່ພວກເດັກນ້ອຍຊ້ໍາບໍ່

ยอมให้สงมให้ส้อมใหย่ลาว, เพื่องแท้งหย้าแท้งก็บ่ให้, ข้อยขอบอกไว้ก่อนเด้อว่าคันเป้นแนวนี้ ข้อยฉีใช้มาดตะกาบเด็ดขาดจุนแรงละ, ที่ข้อยบ่ได้เป้นสะมาฉิกอีกแล้อ จั่งฉี้มันกะบ่แม่นอ่าฉิบ่เป้นหยังเด้, ข้อยเคียเป้นมาแล้อ, จั่งฉั้นบ่ควนฉิมาเธ็ดแนวนี้กับงิวข้อยเด้.

ข้าพะเจ้าติกขะม่าอ้าปากค้างเบิ่งฉายผู้ยู่ต่หน้าโดยบ่เฮ้าใจ ในทันทีนั้นอ่ายังฉิมีวิทีการอันอื่นใดอีกบ่เพื่อต่สู้กับลาว.

-ขอโทดเทาะสะหาย โธดิมฉิก, มันแม่นเลื่องอื่หยังเทาะ? งิวโตนั้น แม่นงิวของเจ้า, มันแม่นสิมบัดส่อนติวของเจ้า. แล้วเป้นหยังฉิเอาเฮ้ามาปินใส่กับหมู่...ย่าสับปินผ้าเช็ดตีนใส่กับผ้าเช็ดโตแม้..! เจ้าเองกำแม่นคูสอนคิมหน่า, แล้อบัดนี้ เบิ่งดูอ่า เจ้าเธ็ดให้พอกเด็กน้อยเบิ่งเจ้าด้อยสายตาแบบใด?

-แม่นหยังเทาะ? ข้อยบ่ได้มาธ้องขอหยังน่า! อ่าแล้อโธดิมฉิก กำเว้าต่ลุดๆว่า: -ข้อยบ่แม่นฉิเอาล้าน่า, แน่นอนแล้อ ข้อยฉิจ่ายค่าหย้า และค่าแรงงานเด็กน้อย ก้าอ่าบ่แพงโพดนะ, ธื...แต่อ่าเอิาลักหมอกเป็บลูกข้อยไปชั้นเด้... กะพอกเด็กน้อยชั้นละข้อยมาถือบ่เห็นเว้าหยัง!

ข้อยสิ่งเอิาไปหา เชเธิ.

ในเอลานั้น เชเธิ ธู้เมื่อถือดีแล้อ, เอิาจัดแจ่งสิ่งงิวของ โธดิมฉิก หนีจากคอกเลีย, มันเสียไปหลายมื้ แน่นอนว่า นายของมันได้เอิามันไปขายแล้อ.

ສອງອາທິດຕໍ່ມາ ໂວໂລດອບ ກໍຕັ້ງບັນຫາຕໍ່ໄປນີ້ຂຶ້ນໃນກອງ ປະຊຸມໃຫຍ່:

-ທ້າງຫມິດນ້ຶຫມາຍຄວາມວ່າແນວໃດ? ເປັນຫຍັ ໂຮດິມຊິກ ໄປຊຸດມັນຝະລັ່ງຢູ່ໃນສວນຂອງນິຄົມ? ຢູ່ເຮືອນຄົວເຮົາຍັງບໍ່ມີກິນ ແລ້ວໂຮດິມຊິກ ຊ້ຳໄປເອົາ ແມ່ນໃຜອະນຸຍາດໃຫ້ເຂົາເຮັດແນວນ້ຶ?

ພວກເດັກນ້ອຍສະຫນັບສະຫນູນໂວໂລດອບ, ຊາໂດຣອບເວົ້າ ຂຶ້ນວ່າ:

-ສິ່ງສຳຄັນ ມັນບໍ່ແມ່ນຫົວມັນຝະລັ່ງດອກ, ລາວເປັນພໍ່ເປັນ ຫົວຫນ້າຄອບຄົວ, ລາວຮຽກຮ້ອງຂໍໃນສິ່ງທີ່ລາວຕ້ອງການນຳຜູ້ມີ ສິດ, ນ້ຳຫນ້າມັນຝະລັ່ງຫັ້ນ ມັນບໍ່ແມ່ນບັນຫາດອກ ແຕ່ວ່າແມ່ນ ພວກເຮົາຕ້ອງການລາວຊັ້ນຫວະ ເກົ້າໂຮດິມຊິກຄືນນ້ຶນະ? ຍາມໃດ ລາວກໍອັດປະຕູນອນຢູ່ໃນຫ້ອງຫລືບໍ່ກໍອອກໄປໃນບ້ານພຸ້ນ, ພວກ ເດັກນ້ອຍຈັກເປ້ືອນຈັກຂ້ຶດຽດ ບໍ່ໄຄ່ເຫັນພໍ່ພວກເຂົາດອກ, ຢູ່ກິນ ຄືຄົນປ່ານ້ຶ. ພໍພວກເຮົາໄປຫາ ເພື່ອໃຫ້ລາວເຊັນບິດລາຍງານຈັກ ບິດ...ບໍ່ຢູ່ແລ້ວເດ້...ຊອກບໍ່ເຫັນ. ລາວນອນຫລືບໍ່ກໍພວມກິນເຂົ້າ ຫລືຍ່ຳໄປກ່ອານ້ຶ ລາວບໍ່ມີເວລາ, ຕ້ອງລ້ຳເລ້ືອຍ ແມ່ນລາວມີປະ ໂຫຍດຫຍັງ?

-ພວກເຮົາຮູ້ວ່າ ພວກຄູສອນຕ້ອງເຮັດວຽກແບບໃດ, -ຕາ ຣາເນັດເວົ້າຂຶ້ນ, -ແຕ່ ໂຮດິມຊິກເຮັດຫຍັງ? ເວລາອອກໄປ ເຮັດວຽກນຳກອງພິເສດ ລາວກໍຢືນກືສຽມໃຈ່ໃສ່ຢູ່ຫັ້ນເດ່ືງຊ່ືອໂມ ຈາກນັ້ນກໍເວົ້າວ່າ: "ເອົາລະ ກັນໄປກ່ອນເດ້ ມ້ືອງກສ່ອນຕ໊ອ"

ແລ້ວກໍໄປ, ສອງຊົ່ວໂມງຕໍ່ມາ ພວກເຮົາກໍເຫັນລາວກັບໝາກ້າງພາຍຕົ່ງເຕັມ.

ຂ້າພະເຈົ້າໃຫ້ສັນຍາກັບເດັກນ້ອຍວ່າ ຈະໃຊ້ມາດຕະການບາງຢ່າງ. ມື້ຕໍ່ມາ ຂ້າພະເຈົ້າໃຫ້ຄົນໄປເອົາ ໂຮດິມຊິກ ມາຫາຢູ່ຫ້ອງການ, ລາວມາໃນຕອນຄ່ຳມືດແລ້ວ ແລະຂ້າພະເຈົ້າກໍເລີ່ມຊັກຟອກສົ້ນເຂົ້າແບບສອງຕໍ່ສອງ ແຕ່ພໍຂ້າພະເຈົ້າເລີ່ມເວົ້າເທົ່ານັ້ນ ໂຮດິມຊິກ ກໍໂມໂຫໂຫໂສຂຶ້ນເວົ້າຂັດທັນທີວ່າ:

-ຂ້ອຍຮູ້ແລ້ວວ່າ ໃຜມາສັບສໍ່ເລື່ອງເຫລົ່ານີ້, ຂ້ອຍຮູ້ດີວ່າໃຜຫາເລື່ອງໃສ່ຂ້ອຍແບບນີ້, ທ້າງຫນິດນີ້ນັ້ນແມ່ນຍ້ອນບັກ ເຊເຣີ ນັ້ນລະ! ແຕ່ ອາມໂຕນ ເຊມີວໂນວິດ ເອີ້ຍ ທາງທີ່ດີເຈົ້າຄວນສືບສາວຫາຄວາມເລື່ອງກ່ຽວກັບບຸກຄົນຜູ້ນີ້ກ່ອນ, ຂ້ອຍເອງສືບມາແລ້ວຮຽບຮ້ອຍ, ບໍ່ມີເຫຼືອງໃຫ້ງົວຂ້ອຍເກີ່ງວ່າຂ້ອຍຊິຈ່າຍກໍຕາມ, ຂ້ອຍຈ່ຳຂາຍມັນໄປ, ລູກຂ້ອຍບໍ່ມີນົມກິນຂ້ອຍຈ່ຳຕ້ອງໄປຫາມາແຕ່ໃນບ້ານພຸ້ນແລ້ວບາດນີ້ເຊີນເຈົ້າກາມເບິ່ງວ່າທ້າວ ເຊເຣີ ຂອງເຈົ້າມັນເອົາຫຍັງແດ່ໃຫ້ຫມາບັກ ມິລ ມັນກິນ ເຈົ້າຮູ້ບໍ? ມັນເອົາຮອດເຂົ້າຫມາກເດືອຍພຸ້ນນ່າ, ອັນເຂົ້າຫມາກເດືອຍທີ່ເອົາໄວ້ຕຳເກືອໄກ່ຫັ້ນເກາະ ມັນເອົາມາຕຳນຸ່ນໆຕົ້ມສຸກດີແລ້ວ ເອົາໃຫ້ຫມາມັນກິນ ໂດຍບໍ່ຕ້ອງຈ່າຍເງິນຈັກອັດ ເປັນອັນວ່າຫມາໂຕນັ້ນໄດ້ກິນກວນເປ້ງຫມາກເດືອຍຂອງພວກເດັກນ້ອຍຟີໆ ກິນລ້ຳຢ່າງຜິດກົດຫມາຍນ່າ ທ້າງນ້ຳຍ້ອນເຫດຜົນອັນດຽວທ່ຳນັ້ນຄືຫມໍເປັນນັກກະເສດ ແລະໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກເຈົ້າ!

-ເຈົ້າໄປເອົາເລື່ອງຫມູ່ນີ້ມາແຕ່ໃສ? -ຂ້າພະເຈົ້າກາມຄືນ.

- ໂອ່... ຂ້ອຍບໍ່ແມ່ນຄົນປະເພດຫາເລື່ອງມາເສກສັນປັ້ນແຕ່ງ ຕົ້ນເອງດອກ ຂ້ອຍບໍ່ເປັນຄົນແນວນັ້ນເລີຍ, ນັ້ນເດ້ເປ໋ຕ໊!

ລາວຈົກຫໍ່ເຈ້ຍນ້ອຍໆຫໍ່ຫນຶ່ງ ອອກມາຈາກກົ່ງເສື້ອໃນແລ້ວພົ່ອອອກ ໃນນັ້ນມີວັດຖຸສີຂາວຊຸ່ນແລະເມັດດຳໆຈຳພວກວັດຖຸປະສົມແນວໃດແນວຫນຶ່ງ.

- ແມ່ນຫຍັງ? - ຂ້າພະເຈົ້າຖາມດ້ວຍຄວາມຕ່ຳໃຈ.

- ກະນີ້ແລ້ວ ແນວຊິພົ້ສູດໃຫ້ເຈົ້າຮູ້ຄວາມຈິງ, ຂັ້ນ ມີ ລໍ ນ່ າ... ຂ໊ຂອງມັນເຈົ້າເຂົ້າໃຈບໍ? ຂ້ອຍຕ້ອງເຝົ້າຈອບເອົາພໍແຮງເດ໊ຈົ່ງເກັບໄດ້ ເຈົ້າເຫັນບໍ່ວ່າ ບັກມີ໋ລ໊ຂ໊ອອກເປັນຫຍັງ? ນ້ ໍ ລະກະໂຕແປ້ງ ຫມາກເດືອຍອ້ອຍຕ້ອຍເລີຍລະ...ແລ້ວຫມໍນັ້ນມັນຊ໊ມາຫວະ? ແມ່ນອນວ່າບໍ່ ມັນຍິບມາແຕ່ຕູ້ໃສ່ຂອງກິນລວມນັ້ນລະ!

ຂ້າພະເຈົ້າຈຳໄດ້ບອກເຂົາວ່າ:

- ໂຮດີມຊິກ, ທາງທ໊ດີເຈົ້າໄປຈາກນິຄົມສາ!

- ແມ່ນຫຍັງ? ໄປຈາກຫນ໊ ້ ຊັ ້ ນຫວະ?

- ເອີ...ໄປໄວທ໊ີ່ສຸດເທົ່າທ໊ີຈະໄວໄດ້. ຂ້ອຍອະນຸຍາດໃຫ້ເຈົ້າອອກໄດ້ແຕ່ມ໊ ້ ນ ້ ເປັນຕົ້ນໄປ ຢ່າງເປັນທາງການເລີຍລະ, ຂຽນໃບລາວ່າເຕັມໃຈອອກຄ໊ ຈະດີກວ່າ.

- ຂ້ອຍບໍ່ໄດ້ວ່າຊິຍອມງ່າຍໆແບບນ ້ ເດ ໋ !

- ຕາມໃຈ, ຈັ່ງໃດກໍໄດ້ ແຕ່ຂ້ອຍຂໍໄລ່ເຈົ້າອອກ.

ໂຮດີມຊິກ ອອກຈາກຫ້ອງການ, ລາວຍອມໃຫ້ເຫດການຜ່ານໄປງ່າຍໆ ຈັ່ງຊ ້ ີ ແລະອອກຈາກນິຄົມໄປໃນສາມ ້ ຕ ໋ ມາ.

ແຕ່ຈະເຮັດແນວໃດກັບນິຄົມໃຫມ່? ພວກເດັກນ້ອຍຢູ່ "ແຕຣບ

ແກ" ແມ່ນສະມາຊິກນິຄົມຜູ້ຂັ້ຍສຸດ, ສ່ວນພວກເຮົາບໍ່ອາດຜ່ອນ ຜັນໂຍະຍາມໃຫ້ດຳເນີນຕໍ່ໄປໄດ້ອີກແລ້ວ. ພວກເຂົາຊິກຕີກັນເອງ ລັກເຕົ່ອງຂອງກັນເປັນປະຈຳ, ທັງຫມົດນີ້ແມ່ນສັນຍານວ່າມີແນວ ໃດແນວຫນຶ່ງຜິດພາດຢູ່ໃນແບບດຳລົງຊີວິດຮ່ວມຫມູ່ແລ້ວ.

ຈະໄປຊອກຫາຄົນຜູ້ສາມາດແບກຫາບວຽກງານ ຫນັກຫນ່ວງ ອັນນີ້ຢູ່ໃສ? ຜູ້ຄົນທີ່ມີຄຸນຄ່າສົມຊື່ນີ້ຊ່າງຫາຍາກເອົາແທ້ເອົາວ່າ.

ບົດທີ ๔๗

ການໄຊພິຊິດຈາກກົມໂຊໂມນ

ໃນປີ ๑๙๔๓ ກັ້ນແກວນັກບຸກຫນ້າສະມາຊິກນິຄົມກ້ອກກີໄດ້ ກ້າວມາເຖິງຂັ້ນພິວພັນໃກ້ຊິດກັບປ້ອມປາສາດແຂງແຮງບ່ອນໃຫມ່ ເຊິ່ງປະກົດວ່າເປັນເລື່ອງແປກປະຫລາດສົມຄວນ ທີ່ພວກເຮົາຕ້ອງ ບຸກເຂົ້າໃສ່ມັນ: ນັ້ນຄືອົງການຈັດຕັ້ງກົມໂຊໂມນ.

ຜ່ານມານິຄົມກ້ອກກີ ບໍ່ເຄີຍເປັນອົງການຄັບແຄບຈັກເທື່ອ. ນັບແຕ່ປີ ๑๙๔๑ ເປັນຕົ້ນມາສາຍພິວພັນຂອງພວກເຮົາກັບ "ອົງ ການອ້ອມແອ້ມ" ນັ້ນມີຫລາຍທັງໃນຮູບແບບຕ່າງກັນ. ຍ້ອນສະ ພາບທາງສັງຄົມແລະປະຫວັດສາດ, ປະຊາຊົນແກວບ້ານໃກ້ເຮືອນ ຄຽງໄດ້ເປັນສັດຕູກັບພວກເຮົາ, ພວກເຂົາເປັນຄູ່ສັດຕູທີ່ພວກເຮົາ ບໍ່ພຽງແຕ່ຕໍ່ສູ້ສຸດຂີດຕາມທີ່ສາມາດເຮັດໄດ້ເທົ່ານັ້ນ ແຕ່ພວກເຮົາ ຊ້ຳຍັງມີການພິວພັນທາງດ້ານການຄ້ານຳອີກ ໂດຍສະເພາະກໍແມ່ນ ຍ້ອນໂຮງຊ່າງທັງຫລາຍຂອງພວກເຮົານັ້ນເອງ, ສາຍພິວພັນດ້ານ ທຸລະກິດເຫລົ່ານີ້ ແຜ່ກະຈາຍອອກໄປຢ່າງກວ້າງໄກຫາຍຂອບແດນ

ຊັ້ນຊີນປໍລະປັກ ເພາະວ່າພວກເຮົາຮັບບໍລິການຊາວນາໃນວົງລັດ ສະຫມີກ້ວາງຂວາງສົມຄວນ ແລະນໍາເອົາບໍລິການຈາກອຸດສາຫະກໍາ ຂອງພວກເຮົາອອກໄປຮອດຂົງເຂດໄກໆເຊັ່ນ ສະໂຕໂຮເຊໂວຍເຢ, ມັດຊູກີ ແລະບຣິກາດິຮອບກາ. ບ້ານໃຫຍ່ໆຫລາຍບ້ານທີ່ຢູ່ໃກ້ໆ ກັບພວກເຮົາ ເຊັ່ນບ້ານ ກົງຊາຮອບກາ, ບ້ານປົຮອບກາ, ບ້ານ ອັງດຣູເກັບກາ, ບ້ານຊາບົຮາລອບການັ້ນເປັນບ່ອນ ທີ່ພວກເຮົາມັກໄປຢາມເປັນປະຈໍາ ທັງນີ້ບໍ່ພຽງແຕ່ໃນດ້ານເສດຖະ ກິດເທົ່ານັ້ນ ແມ່ນແຕ່ຄະນະສອດແນມຊຸດທໍາອິດຂອງພວກເຮົາ ເຊິ່ງໄດ້ທໍາການທ່ອງທ່ຽວ ເພື່ອເປົ້າຫມາຍອັນສູງທອນຢ່າງດຽວຄື ຄົ້ນຄ້ວາຫາຄວາມງາມຂອງສະຕິເພດປະຈໍາທ້ອງຖິ່ນ ຫລືເພື່ອການ ສະແດງອອກເຖິງບຸກຄະລະພາບຂອງເຂົາເຈົ້າເອງໃນເລື່ອງ ຊົງຜົມ ການແຕ່ງກາຍ ວາດທ່າແລະຮອຍຍິ້ມ ແມ່ນແຕ່ການທ່ອງທ່ຽວໄປ ມາຫາສູ່ປະຊາຊົນຄັ້ງທໍາອິດຂອງຊາວນິຄົມເອງ ກໍຍັງມີຜົນໃຫ້ສາຍ ພົວພັນສັງຄົມຂະຫຍາຍຕົວອອກຕື່ມ. ແມ່ນຢູ່ໃນຫມູ່ບ້ານເຫລົ່ານີ້ເອງທີ່ເດັກນ້ອຍຂອງພວກເຮົາໄດ້ທໍາຄວາມຮູ້ຈັກຮັກແພງກັບຊາວ ຫນຸ່ມກົມໂຊໂມນເປັນເທື່ອທໍາອິດ.

ກໍາລັງແຮງຂອງຊາວຫນຸ່ມກົມໂຊໂມນ ໃນຫມູ່ບ້ານເຫລົ່ານີ້ ອ່ອນນ້ອຍສົມຄວນ ບໍ່ວ່າໃນດ້ານປະລິມານກໍຄືໃນດ້ານຄຸນນະພາບ. ກະໂຕຊາວຫນຸ່ມກົມໂຊໂມນໄທບ້ານເອງ ບໍ່ໄດ້ສົນໃຈໄຍດີຕໍ່ສິ່ງອື່ນ ໃດ ນອກຈາກຜູ້ຊາຍກັບເຫລົ້າວິດກາເກືອນ, ຈ່ຽນ ມັນຈຶ່ງສ້າງ ຜົນສະທ້ອນບໍ່ດີໃຫ້ແກ່ຊາວນິຄົມພວກເຮົາ. ນັບແຕ່ສໍານັກກະເສດ ໂຮມຫມູ່ ເລນິນ ໄດ້ມາຕັ້ງຂຶ້ນຢູ່ຕໍ່ຫນ້ານິຄົມໃຫມ່ ທາງຟາກຝັ່ງ

ເບ້ອງຂວາຂອງຫ້ວຍໂກໂລນາກ ບ່ອນທີ່ພວກຊາວນາທັ້ງຫມົດ ແລະຄະນະສະພາໂຊວຽດທ້ອງຖິ່ນພາກັນສະແດງຕົວ ເປັນປໍລະປັກ ກັບພວກເຮົາຢ່າງເປີດແປນນັ້ນ, ພວກເຮົາຈຶ່ງຄົ້ນພົບວ່າມີນັກເຄື່ອນ ໄຫວປະປົນຢູ່ໃນກັນແກວຊາວຫນຸ່ມກົມໂຊໂມນ ແລະຕໍ່ມາພວກ ເຮົາກໍໄດ້ຜູກສໍາພັນກັບພວກຊາວຫນຸ່ມຂອງສໍານັກກະເສດໂຮມຫມູ່ ບ່ອນນີ້. ເດັກນ້ອຍພວກເຮົາຮູ້ຈັກວຽກງານລະອຽດທຸກຢ່າງຂອງສໍາ ນັກກະເສດໂຮມຫມູ່ແຫ່ງໃຫມ່ ຮູ້ຈັກມັນຢ່າງເລິກເຊິ່ງ ກະທັ້ງຮອດ ຄວາມຫຍຸ້ງຍາກ ທີ່ບັງເກີດ ພ້ອມໆກັບການກໍາເນີດຂອງມັນ. ໃນ ຂັ້ນທໍາອິດ ສໍານັກກະເສດໂຮມຫມູ່ໄດ້ຟາດບາດຄ້ອນໜັກໜ່ວງສົມ ຄວນໃສ່ທີ່ດິນຂອງພວກກູລັກ ອັນເຮັດໃຫ້ຝ່າຍນີ້ ມີປະຕິກິລິຍາຕໍ່ ຕ້ານ ຮ່ວມກັນຢ່າງຮຸນແຮງ ແລະເຕັມໄປດ້ວຍຄວາມໂກດແຄ້ນ. ໄຊຊະນະຂອງພວກເຂົາບໍ່ໄດ້ມາຢ່າງງ່າຍດາຍເລີຍ.

ໃນເບ້ງນັ້ນ ຊາວນາຮັ່ງ ຍັງມີກໍາລັງແຮງຫລາຍຢູ່ ແລະມີຕີນມື ຢູ່ໃນເມືອງຫລາຍສົມຄວນ. ການທີ່ພວກເຂົາເປັນກູລັກ ກໍຍ້ງເປັນ ຄວາມລັບຢ່າງຫນ້ງສໍາລັບຜູ້ກໍາອໍານາດຢູ່ໃນເມືອງ. ຫ້ອງການຕ່າງໆ ຢູ່ໃນເມືອງ ກາຍເປັນສະຫນາມຮົບຕົ້ນຕໍສໍາລັບການຕໍ່ສູ້ທີ່ໃຊ້ປາຍ ປາກກາເປັນອາວຸດສໍາຄັນ. ດ້ວຍເຫດນີ້ເອງ ພວກເດັກນ້ອຍນິຄົມ ຈຶ່ງບໍ່ສາມາດເຂົ້າປະກອບສ່ວນໄດ້ໂດຍກົງ ແຕ່ພັນທະທີ່ດິນໄດ້ຮັບ ການແກ້ໄຂຢ່າງກາວອນ ແລະພວກລີງບັນຊີອັນສັບສົນຫຍຸ້ງຍາກ ລະເບີດຂຶ້ນນັ້ນ ພວກເດັກນ້ອຍນິຄົມກັບເດັກນ້ອຍຢູ່ສໍານັກກະເສດ ໂຮມຫມູ່ ຈຶ່ງມີວຽກງານອັນຫນ້າສົນໃຈເຮັດຢ່າງຫລວງຫລາຍ. ສິ່ງ ດັ່ງກ່າວໄດ້ຮັດແຫນ້ນມິດຕະພາບຂອງພວກເຂົາຫລາຍຂຶ້ນ.

ເວົ້າແທ້ແລ້ວ ພວກກຳມະໂຊໂມນຢູ່ກະເສດໂຮມຫມູ່ນັ້ນ ບໍ່ໄດ້ມີ ບົດບາດນຳພາແຕ່ຢ່າງໃດ, ພວກເຂົາຍັງບໍ່ສະຫລຽວສະຫລາດເທົ່າ ເດັກນ້ອຍຮຸ່ນເກົ່າຂອງພວກເຮົາຊ້ຳ ພວກເຂົາເຫລົ່ານີ້ໄດ້ຮັບຜົນປະ ໂຫຍດຈາກວຽກງານຢູ່ໂຮງຮຽນຂອງພວກເຮົາຫລາຍ, ມັນໄດ້ເຮັດ ໃຫ້ພວກເຂົາມີສະຕິທາງດ້ານການເມືອງເລິກເຊິ່ງກວ່າເກົ່າ ພວກ ເດັກນ້ອຍນິຄົມ ເຊິ່ງຕື່ນຕົວແລ້ວ ທັງມີຄວາມທະນົງຕົວທີ່ໄດ້ເປັນ ຊາວກຳມາຊີບນັ້ນເຂົ້າໃຈດີທີ່ສຸດເຖິງຄວາມແຕກຕ່າງ ລະຫວ່າງຖາ ນະຂອງພວກເຂົາກັບພວກຊາວຫນຸ່ມໄທບ້ານ. ວຽກງານກະສິກຳ ອັນຫນັກຫນ່ວງ ແລະຫລວງຫລາຍໃນບາງຄັ້ງນັ້ນບໍ່ສາມາດກືນ ຄວາມຮູ້ສຶກເຊື່ອຫມັ້ນຂອງພວກເຂົາທີ່ວ່າ ຍັງມີກົດຈະກຳອື່ນລໍຄອຍ ພວກເຂົາອີກຢູ່ຄືກັນ.

ພວກຮຸ່ນອາວຸໂສກວ່າຫມູ່ ມີຄວາມສາມາດ ພັນລະນາເຖິງສິ່ງ ທີ່ພວກເຂົາຄອງຄອຍໃນອະນາຄົດ ປະກອບດ້ວຍຄວາມໃຝ່ຝັນປາດ ຖະຫນາຂອງພວກເຂົານຳ. ຜູ້ມີບົດບາດຕົ້ນຕໍຢູ່ໃນການລ່ອຍລູ ຫນູນໃຫ້ພວກເຂົາກຳນົດຄວາມໃຝ່ຝັນປາດຖະຫນາ ແລະທ່ານນິຍົມ ເຫລົ່ານີ້ໃຫ້ໄດ້ຢ່າງຈະແຈ້ງນັ້ນບໍ່ແມ່ນພວກຊາວຫນຸ່ມ ກຳມະໂຊ ໂມນ ໃນຫມູ່ບ້ານໃກ້ຄຽງເຫລົ່ານີ້ດອກ ແຕ່ແມ່ນກຳລັງແຮງງານ ຫນຸ່ມກຳມະໂຊໂມນໃນເມືອງພຸ້ນຕ່າງຫາກ.

ບໍ່ໄກຈາກສະຖານີລົດໄຟປານໃດ ມີໂຮງຊ່າງໃຫຍ່ຂອງອົງການ ລົດໄຟຫລາຍແຫ່ງ. ໃນສາຍຕາຂອງເດັກນ້ອຍນິຄົມ ສະຖານທີ່ ເຫລົ່ານີ້ແມ່ນບ່ອນເຕົ້າໂຮມທີ່ມີລະດັບສູງສົມຄວນ ເພື່ອຕຸ້ມຕ່ອມ ເອົາຄົນປະເສີດ ແລະວັດຖຸສິ່ງຂອງ ເຊິ່ງພວກເຂົາຫວງແຫນໄວ້ຢູ່

ຮ່ວມກັນ. ໂຮງຊ່າງຂອງທາງລົດໄຟເຄີຍມີອະດີດອັນສະຫງ່າງາມໃນ
ສະໄໝການປະຕິວັດມາແລ້ວ ແລະທັງກໍມີສະມາຊິກພັກຈຳນວນ
ຫນຶ່ງປົນຢູ່ນຳ. ພວກເດັກນ້ອຍນິຄົມໄຝ່ຝັນເຖິງສະຖານທີ່ເຫລົ່ານີ້
ຄືກັບວ່າ ມັນແມ່ນຫໍຜາສາດໃນເທບນິຍາຍທີ່ຢູ່ກວາງໄກສຸດເມ
ເຖິງ. ຫໍຜາສາດເຫລົ່ານີ້ງົດງາມວິຈິດພິດສະດານຍິ່ງກ່ວາລວນກິກ
ເສົາຂອງຜາສາດ "ວິຫົກສີຄາມ"* ຊ້ຳອີກ, ມັນແມ່ນ ສ່ຳຫນຶ່ງທີ່ມີ
ຈັກຍົກຂະຫນາດມະຫຶມາ, ມີລະບົບຄ້ອນຕົ້ວຍພະລັງອາຍນ້ຳ,
ແລະເຄື່ອງອັດຕະໂນມັດຕ່າງໆທີ່ຄ້າຍກັບວ່າມີລະບົບບັນຊາສະຫລວ
ສະຫລາດ. ມະນຸດຜູ້ຄອງຜາສາດນີ້ແມ່ນລາຊະບຸດຜູ້ອົງອາດສະຫງ່າ
ງາມກ່ວາຫມູ່ ທົ່ງເພດຜ້າອາພອນອັນປະເສີດແຈວວາວເຫລື້ອມ
ດ້ວຍນ້ຳມັນເຄື່ອງຢອດຫົວຈັກລົດໄຟ ລະເຫີຍກົ່ນຫອມທຸກໆຊະ
ນິດຂອງໂລຫະເຫລັກອອກມາ. ຝ່າມືຂອງພວກເຂົາມີສິດທີ່ຈະແຕະ
ຕ້ອງຈັບບ່າຍພົ້ນຜິວຫນ້າອັນສຸດແສນສັກກາລະປູຊາຂອງ ແຜ່ນແປ,
ທໍ່ກົມນິນແລະຈອຍຕ່າງໆ, ຫມາຍຄວາມວ່າຊັບສົມບັດທຸກຢ່າງໃນ
ຫໍຜາສາດນີ້ ແລະມະນຸດເຫລົ່ານີ້ກໍແມ່ນປະເພດພິເສດພວກຫນຶ່ງ
ພວກເຂົາບໍ່ມີຫນວດເຄົາເຍງທີ່ຫວີໄວ້ຢ່າງຮຽບຮ້ອຍ ແລະບໍ່ມີຮູບ
ຮ່າງອ້ວນພີສົມປູນແບບພວກຊາວນາຮັ່ງ. ໃບຫນ້າຂອງພວກເຂົາ
ບົ່ງບອກແຈວສະຫລາດສະຫລວ, ອ່າວຄົມຈ່ອຍແຕ່ແຈ່ມໃສໄປ
ດ້ວຍຄວາມຮອບຮູ້ທາງດ້ານວິທະຍາສາດ ແລະອຳນາດ ເຊັ່ນອຳ

ວິຫົກສີຄາມ*: ຊື່ຜາສາດໃນນິທານເອີລົບ ຊຶ່ງມີຄວາມສວຍ
ສົດງົດງາມແບບພິດສະດານທີ່ສຸດ.

ນາດ ເຫນືອຫົວ ຈັກເຄື່ອງກິນໄກເຄື່ອງນຸ່ງຕ່າງໆ, ດ້ວຍຄວາມຮອບ
ຮູ້ກ່ຽວກັບກົດເກນອັນນຶກນຶນສັບສົນ ເຊັ່ງໄມ້ຈັບ, ເຄື່ອງຮອງ, ໄມ້
ງັດເຄື່ອງຊັ່ງທຸກຢ່າງ ຕ່າງກໍຍິນຍອມຮັບພ້ອງການບັນຊາຂອງພວກ
ເຂົາ. ໃນຊຸມຊົນເຫລົ່ານີ້ ມີຊາວຫນຸ່ມກົມໂຊໂມ່ນຫລາຍຄົນ
ທີ່ສະດຸດຕາພວກເຮົາດ້ວຍທ່າທີທັນສະໄຫມອັນຈິບງາມ, ໃນທີ່ນີ້
ພວກເຮົາແນມເຫັນຄວາມເຊື່ອຫມັ້ນອັນຈິງໃຈ ພວກເຮົາໄດ້ຍິນ
ຄໍາເວົ້າອັນຫນັກແຫ້ນເຂັ້ມແຂງຕາມອຸດົມຄະຕິຂອງຊາວກໍາມະ
ກອນ.

ແມ່ນແລ້ວ ສະຖານທີ່ນັ້ນແມ່ນໂຮງຊ່າງຂອງອົງການທາງລົດ
ໄຟ! ມັນແມ່ນຈຸດສຸດຍອດແຫ່ງຄວາມປາດຖະຫນາຂອງເດັກນ້ອຍ
ນິຄົມຫລາຍຄົນໃນສະໄຫມປີ ໑໙໘. ສຽງຊ່າລືກ່ຽວກັບພິນງານມະ
ນຸດຊາດອັນມະຫັນພິລຶກພິລໍ້ກວ່ານີ້ຍັງດັ້ງກ້ອງມາຮອດຫູພວກເຂົາ
ອີກເລັ່ນ ໂຮງງານເຫລັກກ້າ, ເລນິນກຣາດ; ແລະບັນດາໂຮ
ງງານທໍ່ລົ່ເລັ່ນປູຕິລົບ ແລະຊອກໂມໂວ. ແຕ່ວ່າໃນໂລກນີ້ ອັບຈົນ
ໃນສິ່ງມະຫັດສະຈັນແລ້ວບໍ? ຄວາມໄຝ່ຝັນຂອງເດັກນ້ອຍນິຄົມຜູ້
ຕໍ່າຕ້ອຍຄົນຫນຶ່ງໃນຕ່າງແຂວງບໍ່ອາດເອື້ອມເຖິງສິ່ງຕ່າງໆ ເຫລົ່ານີ້
ດອກ. ດັ່ງນັ້ນ ພວກເຮົາຈຶ່ງເລີ່ມທໍາຄວາມຮູ້ຈັກຮັກແພງຢ່າງໃກ້
ຊິດກັບກໍາມະກອນທາງລົດໄຟ ແລະພວກເຮົາກໍມີໂອກາດໄດ້ພົບ
ໄດ້ເຫັນດ້ວຍສາຍຕາຂອງພວກເຮົາເອງ, ສໍານຶກເຫັນສະເຫນຂອງ
ພວກເຂົາດ້ວຍອິນຊີທັ້ງຫມົດຂອງພວກເຮົາ ທີ່ໄດ້ສໍາຜັດກັບມັນໂດຍ
ກົງ. ແມ່ນພວກເຂົາເອງທີ່ມາຫາພວກເຮົາກ່ອນ ແລະກໍແມ່ນກະໂຕ
ຊາວຫນຸ່ມກົມໂຊໂມນັ້ນເອງ. ວັນອາທິດຫນຶ່ງ ການາບານິບ
ແລ່ນມາຫາຂ້າພະເຈົ້າຢູ່ຫ້ອງການທັ້ງຮ້ອງວ່າ:

-ພວກລາວຫນຸ່ມກົມໂຊໂມນທາງລົດໄຟມາແລ້ວ! ຄັກຂະ ຫນາດເລີຍ!

ພວກເຂົາເອງເຄີຍໄດ້ຍິນຫລາຍອັນຫລາຍແນວດີໆ ກ່ຽວກັບນິ ຄົມແລ້ວ ຈຶ່ງຊັ້ນຈ໋ຳພາກັນມາຮູ້ຈັກກັບພວກເຮົາ. ພວກເຂົາມານຳ ກັນເຈ້ຄົນ, ພວກເດັກນ້ອຍພາກັນປຸ້ມໄປຫຸ້ມລ້ອມພວກເຂົາໄວ້ ຢ່າງແໜ້ນຫນາອົບອຸ່ນ, ທັງແຫຍ້ເຂົ້າໄປໃກ້ໆ, ຫຸ້ມຫນ້າຫຸ້ມ ຫລັງບໍ່ຫ່າງພໍສອກ, ແລ້ວພາພວກເຂົາໄປທ່ຽວຊົມບໍລິເວນນິຄົມ ໃຫມ່ຢ່າງທົ່ວເຖິງ, ພາພວກເຂົາໄປເບິ່ງມ້າ ຄອກຫມູ, ໄປຫາ ແຊເຣີ ແລະເຮືອນແກ້ວ ຕາມສະພາບທຳມະດາຂອງມັນ, ໃນ ເວລາດຽວກັນ ພວກເຮົາກໍຮູ້ສຶກ ຢູ່ໃນສ່ວນເລິກຂອງຫົວໃຈ ເຖິງ ຄວາມໂຮ້ຄ່ແຫ່ງຊັບສົມບັດຂອງພວກເຮົາເມື່ອສົມທຽບໃສ່ຄວາມອຸ ດົມຮັ່ງມີຂອງໂຮງຊ່າງ. ພວກເດັກນ້ອຍຮູ້ສຶກປະທັບໃຈຫລາຍທີ່ ລາວຫນຸ່ມກົມໂຊໂມນບໍ່ສະແດງທ່າທີ ຂີ້ອ໋ຽດ ຂີ້ກຽດ ຂີ້ຄ້ານ ຕໍ່ກັບພວກເຂົາ, ບໍ່ ວ່າທ່າເປັນຜູ້ເຫນືອກ່ວາພວກເຂົາ ແຕ່ຫາກສະແດງຄວາມອ່ອນ ຊ້ອນພໍໃຈແຝງດ້ວຍຄວາມສົງໄສເລັກນ້ອຍຕໍ່ສິ່ງທີ່ພວກເຂົາເຫັນ.

ກ່ອນລາຈາກໄປ ພວກລາວຫນຸ່ມກົມໂຊໂມນແວ່ມາພົບຂ້າພະ ເຈ້ຢູ່ຫ້ອງການ ເພື່ອໂອ້ລົມກັນເລັກນ້ອຍ. ພວກເຂົາສົນໃຈແລະ ຢາກຮູ້ວ່າເປັນຫຍັງຢູ່ໃນນິຄົມຂອງພວກເຮົາ ຈ໋ຳບໍ່ມີສະມາຊິກລາວ ຫນຸ່ມກົມໂຊໂມນ. ຂ້າພະເຈ້ໄດ້ເລົ່າເຖິງປະຫວັດຊີວິດອັນຫນ້າເສົ້າ ຂອງນິຄົມພວກເຮົາສູ່ພວກເຂົາຟັງສັ້ນໆ.

ມາຮອດປີ ໑໙໔໔ ນັ້ນ ພວກເຮົາໄດ້ພະຍາຍາມຈັດຕັ້ງຫນ່ວຍ ລາວຫນຸ່ມກົມໂຊໂມນຂຶ້ນຫນ່ວຍຫນຶ່ງຢູ່ໃນນິຄົມແລ້ວ ແຕ່ອົງການ

ຊາວຫນຸ່ມກອມມູນິດປະຈຳທ້ອງຖິ່ນໄດ້ຄັດຄ້ານຢ່າງເດັດດ່ຽວ ໂດຍ ເວົ້າວ່າ: ນິຄົມຂອງພວກເຮົາແມ່ນນິຄົມຊາວຫນຸ່ມຜູ້ຕິດໄພສັງຄົມ, ຈັ່ງຊັ້ນເຮັດແນວໃດ ຈຶ່ງຈະມີຜູ້ເປັນຊາວຫນຸ່ມກົມໂຊໂມນໄດ້? ພວກ ເຮົາໄດ້ອ້ອນວອນຮ້ອງຂໍອະທິບາຍຖືກຖ່ຽງຊູຊີຈົນນ້ຳລາຍ ຟູມປາກ ແລ້ວ ແຕ່ເພິ່ນກໍອ້າງເຫດຜົນອັນດຽວນີ້ກັບພວກເຮົາມາຕະຫລອດ ຄື: ມີຊາວຫນຸ່ມຕິດໄພສັງຄົມຢູ່ນຳພວກເຮົາ. ລ້ຳໜ້າໃຫ້ພວກເຂົາ ອອກຈາກນິຄົມກ່ອນ ມີຫນ້າສີ້ຍັ້ງຍືນຄັກແນ່ວ່າ ຜ່ານການສຶກສາ ອົບຮົມ ຈາກນັ້ນ ພວກເຂົາບາງຄົນ ຈຶ່ງອາດຖືກຮັບເຂົ້າເປັນສະມາ ຊິກຊາວຫນຸ່ມໄດ້.

ກຳມະກອນທາງລົດໄຟ ເຫັນອົກເຫັນໃຈ ເຂົ້າໃຈໃນສະພາບ ຂອງພວກເຮົາດີ ແລະໃຫ້ສັນຍາວ່າຈະຊ່ອຍເຫລືອພວກເຮົາໂດຍ ຜ່ານອົງການຈັດຕັ້ງຊາວຫນຸ່ມກົມໂຊໂມນຢູ່ໃນເມືອງ ແລະແລ້ວໃນ ວັນອາທິດຕໍ່ມານັ້ນເອງ ສະມາຊິກຄົນຫນຶ່ງຂອງພວກເຂົາກໍກັບມາ ຍັງນິຄົມ ແຕ່ນັ້ນ ກໍພຽງແຕ່ເພື່ອນຳເອົາຂ່າວອັນບໍ່ຫນ້າຍິນດີປານ ໃດມາສູ່ພວກເຮົາ: ຢູ່ໃນຄະນະກຳມະການກົມໂຊໂມນຂັ້ນເມືອງ ແລະຂັ້ນແຂວງນັ້ນ ມີຜູ້ເວົ້າວ່າ: ຖືກຕ້ອງດີແລ້ວເດ້, ເຮັດໃດຈຶ່ງ ຈະມີຊາວຫນຸ່ມກົມໂຊໂມນຢູ່ໃນນິຄົມຫນຶ່ງໆ ຈຶ່ງສະມາຊິກປະກອບ ດ້ວຍອະດີດສະມາຊິກຂອງເຈົ້າພໍ່ ມາກໂນ ຜູ້ເປັນຄາດຕະກອນ... ເວົ້າງ່າຍໆປະເພດບຸກຄົນທີ່ເປັນຫນ້າສົງໄສທັງນັ້ນ?

ຂ້າພະເຈົ້າອະທິບາຍໃຫ້ເຂົາຟັງວ່າ ພວກເຮົາມີອະດີດສະມາ ຊິກຂອງເຈົ້າພໍ່ມາກໂນ ແຕ່ພຽງຫນ້ອຍດຽວ ແລະກໍແມ່ນເລື່ອງບັງ ເອີນແທ້ໆທີ່ພວກເຂົາຕົກໄປຢູ່ໃນກຸ່ມຄົນພວກນີ້. ແລະໃນຂັ້ນສຸດ

ທ້າຍ ຂ້າພະເຈົ້າຍັງໄດ້ອະທິບາຍໃຫ້ເຂົາຟັງອີກຄັ້ງວ່າ ບໍ່ຄວນກຳ
ນົດຄວາມຫມາຍຂອງຄຳວ່າ "ດັດແກ້" ແລ້ວຕາມຮູບການພາຍນອກ
ຄືກັບທີ່ເພິ່ນໃຊ້ກັນຢູ່ໃນເມືອງ. ສຳລັບພວກເຮົາການດັດແກ້ຜູ້ໃດ
ຜູ້ຫນຶ່ງນັ້ນ ມັນແມ່ນເລື່ອງເລັກນ້ອຍເທົ່ານັ້ນ, ຄວາມຈິງມີຢູ່
ວ່າ ພວກເຮົາຕ້ອງໃຫ້ການສຶກສາອົບຮົມອັນໃຫມ່ແກ່ເຂົາທັງຫມົດ
ເລີຍ, ຫມາຍຄວາມວ່າບຳລຸງລ້ຽງໃນແບບທີ່ວ່າ ບໍ່ພຽງແຕ່ຈະບໍ່
ປ່ອຍໃຫ້ເຂົາເປັນອັນຕະລາຍ ຫລືຕ້ອທຳລາຍສ້າງຄວາມເສຍຫາຍ
ແກ່ສັງຄົມ ເຊິ່ງເຂົາສັງກັດຢູ່ເທົ່ານັ້ນ ແຕ່ຈະໃຫ້ເຂົາກາຍເປັນປະຊາ
ຊົນຜູ້ຫາວັນດຸຫນຸ່ນຂອງຍຸກໃຫມ່. ແຕ່ຈະເຮັດແນວນີ້ໄດ້ແນວ
ໃດ ໃນເມື່ອວ່າແມ່ນແຕ່ຈະເຂົ້າເປັນສະມາຊິກຊາວຫນຸ່ມກົມໂຊໂມນ
ກໍຍັງບໍ່ໄດ້ແລ້ວຍັງບໍ່ທັນ ບາງຄົນຍັງຮ້ຶ້ນເກົ່າອະດີດອັນບໍ່ຈືບ່ງາມ
ແລະບາບກຳໃນສະໄຫມພວກເຂົາຍັງເປັນເດັກນ້ອຍຟຸ້ນຄືນມາອີກ ?
ກຳມະກອນທາງລົດໄຟ ທັງເຫັນດີ ແລະບໍ່ເຫັນດີນຳຄວາມຄິດບາງອັນ
ຂອງຂ້າພະເຈົ້າ. ບັນຫາທີ່ຂ້ອງໃຈກ່ວາຫມູ່ກໍແມ່ນເລື່ອງຂອບເຂດ :
ເມື່ອໃດຈຶ່ງຈະສາມາດຮັບເອົາຊາວນິຄົມເຂົ້າເປັນ ສະມາຊິກກົມໂຊ
ໂມນ ແລະເມື່ອໃດຈຶ່ງບໍ່ຮັບເອົາ ? ແມ່ນໃຜຕ້ອງເປັນຜູ້ຕັດສິນບັນ
ຫານີ້ ?

- ແມ່ນຫຍັງເກາະ ? ແມ່ນໃຜຊິຕັດສິນບັນຫານີ້ຊັ້ນຫວະ ? ມັນ
ກໍແມ່ນກະໂຕອົງການກົມໂຊໂມນຂອງນິຄົມເອງນັ້ນແລ້ວ.

ພວກຊາວຫນຸ່ມກົມໂຊໂມນຈາກໂຮງຊ່າງລົດໄຟ ມາຢ້ຽມຢາມ
ພວກເຮົາກໍ້ຂຶ້ນເລື້ອຍໆ ແຕ່ໃນທີ່ສຸດຂ້າພະເຈົ້າກໍເຂົ້າໃຈເອົາເອງວ່າ
ຈຸດສົນໃຈຂອງພວກເຂົາທີ່ມີຕໍ່ພວກເຮົານັ້ນ ບໍ່ບໍລິສຸດພຸດຜ່ອງແຕ່

ຢ່າງໃດ. ທຳອິດພວກເຂົາ ເບິ່ງພວກເຮົາໃນຖານະເປັນຄາດຕະ
ກອນ, ສອດຮູ້ສອດເຫັນ ຮັ້ຮັ້ຟັນເອົາອະດີດຂອງພວກເດັກນ້ອຍ
ອອກມາ, ພວກເຂົາກຸ່ມຕົວທີ່ຈະຮັບຮູ້ຜົນສຳເລັດຂອງພວກເຮົາ
ແຕ່ຫາກມີຂໍ້ສະຫງວນອັນນຶ: ເຖິງຢ່າງໃດພວກເຮົາກໍແມ່ນຊາວ
ຫນຸ່ມທີ່ອະປົກກະຕິນັ້ນເອງ. ຂ້າພະເຈົ້າປະສົບຄວາມຫຍຸ້ງຍາກສົມ
ຄວນໃນການຕໍ່ສູ້ໃຫ້ບາງຜູ້ບາງຄົນເຫັນພ້ອມຕາມທັດສະນະຂອງຂ້າ
ພະເຈົ້າ.

ນັບແຕ່ມື້ທຳອິດທີ່ຕັ້ງນິຄົມຂຶ້ນ, ຍາມໃດທັດສະນະຂອງພວກ
ເຮົາຕໍ່ບັນຫານີ້ກໍຍັງແມ່ນອັນເກົ່າຢູ່. ຂ້າພະເຈົ້າຕີລາຄາເອົາເອງວ່າ
ວິທີການໃຫ້ການສຶກສາອົບຮົມເທື່ອໃຫມ່ ແກ່ເດັກນ້ອຍຕິດໄພສັງ
ຄົມນີ້ ສິ່ງທີ່ຕ້ອງຍຶດຖືເອົາເປັນພື້ນຖານໃນຂັ້ນຕົ້ນ ກໍແມ່ນການລືມ
ອະດີດຂອງພວກເຂົາຢ່າງແຈບຈົມ ໂດຍສະເພາະ ພຶດຕິກຳຂັ້ນລະບຸ
ໂທດອັນເກົ່າ. ແຕ່ຈະນຳໃຊ້ຫລັກການນີ້ຢ່າງເຂັ້ມງວດຫລືບໍ່ນັ້ນ ຂ້າ
ພະເຈົ້າເອງກໍປະຕິບັດໄດ້ຢ່າງລຳບາກຍາກໃຈຄືກັນ ຍາມໃດຄວນຮູ້
ວ່າ ຍ້ອນສາເຫດໃດເດັກນ້ອຍຄົນນີ້ຖືກສົ່ງມານັ້ນຄຸກຄາມແນວຄຶດ
ຂ້າພະເຈົ້າເລື້ອຍໆ, ຂ້າພະເຈົ້າຢາກຮູ້ວ່າມັນເຮັດຫຍັງຈຳໄດ້ມາ.
ນອກນັ້ຕກກະສາດສາມັນແຫ່ງຫລັກວິຊາຄູ ກໍຍັງພະຍາຍາມເຮັດຄື
ກັບຫລັກຕັກກະສາດທາງການແພດ ແລະທຳທ່າອ້າງເຫດຜົນແບບ
ຕົ້ນໆຄືເປັນຜູ້ສະຫລຸງສະຫລາດວ່າ: ເພື່ອປິ່ນປົວພະຍາດຄົນເຈັບ
ທຳອິດກໍຕ້ອງຮູ້ຈັກມັນກ່ອນ. ແນວຄຶດອັນມີຕັກກະສາດແບບນີ້
ບາງເວລາກໍມີສະເຫນເຫນືອໃຈຂອງຂ້າພະເຈົ້າ, ໂດຍສະເພາະກັບ
ພວກຫມູ່ຄູ່ອາຈານ ແລະພະນັກງານໃນພະແນກສຶກສາປະຊາຊົນ

ນັ້ນໃຫ້ວ່າ ອອນຊອນໄຫລຫລ້ຽງໃນສະເຫນຂອງມັນເປັນພິເສດ ເລີຍ.

ຄະນະກຳມາທິການເດັກນ້ອຍຕິດໃຜ້ສັ່ງຄົນສົ່ງ "ສຳເນົາຄະດີ" ຂອງພວກນັກຮຽນມາໃຫ້ພວກເຮົາບັນຈຸລາຍລະອຽດທຸກຢ່າງ ກ່ຽວ ກັບການຊັກຖາມພວກເຂົາ, ຄຳໃຫ້ການປຽບທຽບ ແລະແນວສັບ ສົນອື່ນໆອີກຫລາຍຢ່າງ ເພື່ອໃຫ້ພວກເຮົານຳໃຊ້ໃນການສຶກສາພະ ຍາດ.

ຢູ່ນິຄົມ ຂ້າພະເຈົ້າສາມາດຊັກຊວນໃຫ້ຄູສອນທັ້ງຫມົດຫັນມາ ເຫັນດີນຳທັດສະນະຂອງຂ້າພະເຈົ້າ. ນັບແຕ່ປີ ຄ.ສ ๑๙๔๔ ມາຂ້າພະເຈົ້າ ຈຳຮ້ອງຂໍໄປທາງຄະນະກຳມາທິການ ບໍ່ໃຫ້ສົ່ງ "ສຳເນົາຄະດີ" ໃດໆ ມາໃຫ້. ດັ່ງນັ້ນ ພວກເຮົາຈຶ່ງຫມົດຄວາມສົນໃຈໃຄ່ຮູ້ຢ່າງແທ້ຈິງຕໍ່ ຄວາມຜິດພາດໃນອະດີດຂອງພວກເດັກນ້ອຍ ແລະຜົນອັນຫນ້າພໍ ໃຈຂອງມັນກໍຄືວ່າ ພວກເດັກນ້ອຍເອງກໍລືມມັນໄປໄດ້ໂດຍເວລາ ກັນ. ຂ້າພະເຈົ້າເອງປົ້ມປິຕິທີ່ສຸດ ເມື່ອເຫັນວ່າຢູ່ພາຍໃນນິຄົມ ຂອງພວກເຮົານີ້ຄວາມກັງວົນສົນໃຈກ່ຽວກັບອະດີດຄ່ອຍໆລຶບຈາງໄປ ເທື່ອລະຂັ້ນ ແລະເງົາແສງແຫ່ງອັນເວລາທີ່ເຕັມໄປດ້ວຍຄວາມອັບ ປະຍົດ ຄວາມເຈັບປວດແລະຄວາມເຮືຮ້າຍຈ້ຳໃຈທັ້ງຫລາຍໄດ້ເຫືອ ຫາຍໄປຈາກຊີວິດຂອງພວກເຮົາແລ້ວ, ເບິ່ງໃນແງ່ນີ້ ນັບວ່າພວກ ເຮົາກ້າວເກົ້ງ ສົ່ງໄຜ່ຜົນສຸດຍອດແລ້ວຄື: ແມ່ນແຕ່ພວກເດັກນ້ອຍ ທີ່ມາໃຫມ່ເອງກໍຮູ້ສຶກຫມຸດຫມິດ ບໍ່ຄັກແມ່ໃນຕົວເອງທີ່ຈະເລົ່າ ເກົ້ງຜົນງານຂອງຕົນ.

ແລະແລ້ວໂດຍບໍ່ຄາດຝັນແຕ່ຢ່າງໃດ, ໃນໂອກາດອັນສຸດແສນ

ອຳນວຍເຊັ່ນການຈັດຕັ້ງອົງການຊາວຫນຸ່ມກົມໂຊໂມນຂຶ້ນໃນນິຄົມ ນີ້ ພວກເຮົາຊ້ຳພັດຕ້ອງຫັນມາຮົ້ຟື້ນອະດີດອີກ ແລະນຳເອົາຄຳສັບ ທີ່ສຸດແສນອະເຫຍົ້ອງເຊັ່ນຄຳວ່າ "ດັດສ້າງ", "ຜູ້ຕ້ອງໂທດ", "ສຳເນົາຄະດີ" ນັ້ນກັບຄືນມາເວົ້າອີກ.

ຍ້ອນມີອຸປະສັກຂວາງທາງ, ຄວາມມຸ່ງຫວັງ ຢາກເປັນຊາວ ຫນຸ່ມກົມໂຊໂມນຂອງພວກເດັກນ້ອຍຈຶ່ງມີທ່າທີດ້ຶ໊ງເອົາຈິງເອົາຈັງ ຫລາຍຂຶ້ນ: ພວກເຂົາກຸ່ມຕົວໂດດເຂົ້າສະຫນາມຮົບຢ່າງແທ້ຈິງ. ບຸກຄົນທີ່ມີທ່າອຽງຢາກຜ່ອນຜັນເຊັ່ນ ຕາຮາເນັດ ໄດ້ສະເຫນີໃຫ້ ໃຊ້ວິທີທາງອ້ອມ ໂດຍອອກໃບປະກາດຮັບຮອງວ່າ "ຖືກດັດສ້າງ ແລ້ວ" ໃຫ້ຜູ້ຢາກເຂົ້າເປັນຊາວຫນຸ່ມກົມໂຊໂມນ ໂດຍມີຄວາມ ຫມາຍອີກວ່າ ເພິ່ນຈຳເປັນຕ້ອງໃຫ້ພວກເຂົາຢູ່ໃນນິຄົມ ຕໍ່ໄປ. ສຽງ ສ່ວນຫລາຍຄັດຄ້ານວິທີທາງປົບປັ້ນເຊັ່ນນີ້, ຊາໂດຣອບ ໂມໂຫ ຈົນຫນ້າແດງ, ຫມໍເວົ້າວ່າ:

-ບໍ່ເອົາແບບນີ້ດ໊ີ! ມັນບໍ່ແມ່ນເລື່ອງຊິ່ນາຕໍ່ຮອງຄືເຮັດກັບ ພວກຊາວນາຮັ່ງໃດ໋, ບໍ່ມີເລື່ອງຊິຕີອະຊິ້ດ໋ມຜູ້ໃດຫນົດ. ພວກເຮົາ ຕ້ອງການໃຫ້ມີອົງການຊາວຫນຸ່ມກົມໂຊໂມນຢູ່ໃນນິຄົມ ແລະກໍ່ມີ ແຕ່ພວກເຮົານີ້ເທົ່ານັ້ນ ຈຶ່ງຕັດສິນໄດ້ວ່າ ຜູ້ໃດສົມຄວນເປັນຫລືບໍ່ ສົມຄວນ.

ຫລາຍຄັ້ງຫລາຍຄາວ ພວກເດັກນ້ອຍພາກັນໄປຢ້ຽມຢາມພົວ ພັນກັບອົງການຈັດຕັ້ງກົມໂຊໂມນໃນເມືອງ ພວກເຂົາພາກັນຈົ່ມວ່າ ຮ່ຳຮ້ຶຮ່ຳໄຮແຕ່ໂດຍທົ່ວໄປແລ້ວກໍ່ບໍ່ໄດ້ຮັບຜົນຫຍັງ.

ແຕ່ແລ້ວໃນລະດູຫນາວປີ ໑໙໔໓ ນັ້ນເອງ ພວກເຮົາກໍ່ບັງ

ເອີນໄປເກີດເລື່ອງໃຫ້ໄດ້ເປັນຫມູ່ເພື່ອນກັບອ້ຽການກິນໂຊໂມນອີກ ແຫ່ງຫນຶ່ງ.

ໃນເວລາຄ້ອຍແລງວັນຫນຶ່ງ ຂ້າພະເຈົ້າກັບ ອານໂຕນພາກັນ ເດີນທາງກັບມານິຄົມໂດຍລົດເລື່ອນຫິມະອ່າວເບົາ ແກ່ໂດຍອີ່ເມຣິ ເຊົ່ງບັດນີ້ອ້ວນພີດ້ຽງມຂຶ້ນເຫລື້ອມຍິບຍັບ, ມັນຍ່າງລາກລົດມາຢ່າງ ສະບາຍ. ພໍມາຮອດຫ້ວໂນນຄ້ອຍ, ສິ່ງທີ່ພວກເຮົາບໍ່ຄາດຝັນວ່າ ຈະພົບເຫັນຢູ່ໃນຂ້ຽເຂດນີ້ກໍປາກົດຕໍ່ສາຍຕາ ນັ້ນຄືມີອູດຕົວຫນຶ່ງ ນອນຂວາງທາງຢູ່. ມ້າອີ່ເມຣິບໍ່ສາມາດສູ້ທົນຕ້ານທານກັບຄວາມຮູ້ ສຶກກຽດຊັງຕາມທໍາມະຊາດຂອງມັນໄດ້ ຈົ່ງໂຕສັ່ນບົ້ນງົ້ນຂຶ້ນ ສອງຂາ ຫນ້າສັກຄະໂຍງສູງ ແລ້ວອອກແລ່ນຫອບໄປສຸດແຮງໂລດ. ອານ ໂຕນເອົາຕີນຍັນລົດດຶງຫມົດແຮງ ແຕ່ບໍ່ສາມາດ ດຶງກ່ອງມ້າໄວ້ໄດ້. ລົດຂອງພວກເຮົາມີຈຸດອ່ອນບ່ອນຫນຶ່ງ ເຊົ່ງວ່າກັນຕາມຈິງແລ້ວ ອານໂຕນ ກໍໄດ້ບອກເຕືອນແຕ່ດົນແລ້ວ ຄືກະໂຕຄັນລົດເອງສັ້ນ ໂພດຈັ່ງຊັ້ນ ມັນຈຶ່ງພາພວກເຮົາແລ່ນລົ່ວໄປສູ່ອຸບັດເຫດຫນຶ່ງ ເຊົ່ງ ສ້ຽງສຸດລົ້ງດ້ວຍການຮູ້ຈັກໃກ້ຊິດກັບອ້ຽການກິນໂຊໂມນ ແຫ່ງໃຫມ່ ບ່ອນຫນຶ່ງ. ເລັບຕີນຫນ້າຂອງອີ່ເມຣິທີ່ແລ່ນຄວບໄປແບບຕົ້ນຢ້ານ ກະທົບກັບແຜ່ນເຫລັກຂອບລົດ ເຮັດໃຫ້ມັນຕົ້ນຂຶ້ນແຮງກ່ວາເກົ່າ ອີກ ຈັ່ງຊັ້ນມັນກໍເລີຍຍົ່ງລາກແກ່ພວກເຮົາລົ້ງດ້ວຍຢ່າງໄວຊະນິດມະ ຫັນຕະລາຍມຸ່ງສູ່ຄວາມຈິບຫາຍຢ່າງຫລີກບໍ່ພົ້ນ ທັ້ງຂ້າພະເຈົ້າທັ້ງ ອານໂຕນ ພາກັນດຶງເຊືອກບັງຫ້ຽນ ທັ້ງສອງເສັ້ນ ແຕ່ນັ້ນ ພໍປານ ວ່າໄປຕົ້ມຫມົ້ຕົ້ມເຈຍໃຫ້ມັນຊ້ຳ. ອີ່ເມຣິ ສັ່ນເຜົ່ງຂຶ້ນເທົ່ງຫ້ວ ໄປມາ ແລ້ວເລັ່ງຝີຕີນຂຶ້ນໄວຈົນເປັນຕາຢ້ານກ່ວາເກົ່າ. ຂ້າພະເຈົ້າ

ແນມເຫັນບ່ອນທີ່ ທຸກຢ່າງຈະຍຸຕິລົງຢ່າງອອດວາຍຢູ່ຕໍ່ຫນ້າແລ້ວ: ບ່ອນທາງໂຄ້ງຕົນຄ້ອຍມີກອງນກະແທະຫລາຍເຫລັ້ມ ຂອງພວກ ຊາວນາຈອດຢູ່, ເຂົາເຈົ້າປົດສັດອອກກິນນ້ຳຢູ່ບໍ່ໄກຈາກປ້ອມຍາມ ເທົ່າໃດ. ບໍ່ມີຫົນທາງຈະຫລີກ ຄວາມອອດວາຍອັນນີ້ເລີຍ ເພາະ ມີແນວຂວາງທາງແລ້ວ. ແຕ່ພວກເຮົາໂຊກດີຢ່າງຫນ້າອັດສະຈັນ ອີ່ເມຣີ ພາພວກເຮົາແລ່ນຜ່ານຮາງນ້ຳແລະກອງນກະແທະຈຸ້ມຫນຶ່ງ ຂອງຊາວບ້ານໄປໄດ້ ມີສຽງໄມ້ຫັກແລະສຽງຮ້ອງໄລ່ຫລັງ ແຕ່ພວກ ເຮົາເປີດມາຮອດໄກ ລົງນັ້ນຄ້ອຍແລ້ວຈັ່ງຊັ້ນບາດນີ້ ຈົ່ງບິນຊ້າລົງ ແດ່ ທາງກະຫນິນຮາບຮຽບ ແລະຊື່ດີ, ອານໂຕນ ສາມາດງວາກ ຊ້າຍງວາກຂວາແລະງວາກຫລັງຄືນເບິ່ງ:

-ພວກເຮົາຍຶດກອງນຂະເຈົ້າມຸ່ນອັບຢັບ. ຕ້ອງຟ້າວຫນີໄວໆ.

ອານໂຕນ ພວມຈະຍົກມືຟາດແສ້ໃສ່ຫລັງມ້າເຊິ່ງແລ່ນຊຳບາດ ກ້ວາງໆຢູ່ ແຕ່ຂ້າພະເຈົ້າດຶງແຂນກ້ານກ້ຽງຂອງມັນໄວ້ກ່ອນທັ່ງບອກ ວ່າ:

-ຊ້າໄປແລ້ວລະ! ເບິ່ງພຸ້ນນະ ມ້າພວກເຂົາ ມັນຄັກຊ່ຳໃດ.

ເປັນຄວາມຈິງວ່າເວລານັ້ນ ຢູ່ທາງເບື້ອງຫລັງຂອງພວກເຮົາມີ ມ້າແລ່ນຊຳອ້ອນງາມດີຕິວຫນຶ່ງ ພວມແລ່ນລຸດໆມາຕາມກະຫນິນ ດ້ອຍບາດຕົນກ້ວາງໆ ແລະສະຫມ່ຳສະເຫມີ, ທາງຫລັງຂອງມັນມີ ຜູ້ຊາຍໃສ່ເສື້ອຕິດປອກຍິດສີແດງຊ່ຳທີ່ຄໍ ຄົນຫນຶ່ງ ເຂົາພວມສັກ ແສງຕາມາໃສ່ຜູ້ຫລົບຫນີໂຊກຮ້າຍຢ່າງບໍ່ວາງຕາ. ພວກເຮົາພາ ກັນຢຸດກອງນ, ຊາຍຜູ້ໃສ່ເສື້ອຕິດປອກຍິດສີແດງທີ່ຄໍຍືນຢູ່ເທິງກະ ບະລິດ, ມືເບື້ອງຫນຶ່ງຄ້ຳບ່າໃຫລ່ຄົນຂັບ, ເຂົາບໍ່ມີບ່ອນນັ່ງເລີຍ

ເພາະບ່ອນນັ່ງດ້ານຫລັງ ແລະຝາແອ້ມກະບະກວງນກາຍເປັນເສດ ໄມ້ຕໍ່ກັນໂຍະເຍະພໍແຕ່ໃຫ້ມ້າລາກແກ່ໄປຕາມທາງໄດ້, ເບິ່ງທົ່ວໄປ ແລ້ວ ຮອດບໍ່ຮູ້ວ່າຕອນຂາດຕອນມຸ່ນຫັກແມ່ນບ່ອນໃດແທ້.

-ນໍາມາເດີ້! -ຊາຍໃນເຄື່ອງແບບທະຫານອອກຄໍາສັ່ງ ນໍ້ສຽງ ກ້ວຮູຄໍ.

ພວກເຮົາປະຕິບັດນໍາທັນທີ, ອານໂຕນຍົ້ມເບີກບານ ມັນພໍໃຈ ຫລາຍທີ່ໄດ້ເຫັນວ່າ ມີອັນປ່ຽນແປງຢ່າງບໍ່ຄາດຄິດມາກ່ອນ ຢູ່ໃນ ກວງນກະບະເຫລັ້ມນີ້ ຍ້ອນການແລ່ນບໍ່ຖືກຮ່ອງຖືກຮອຍຂອງກວງນ ພວກເຮົາ. ສິບນາທີຕໍ່ມາ ພວກເຮົາກໍມາຮອດຫ້ອງການຂອງ ເກ. ເປ. ອູ*, ເວລານັ້ນສີຫນ້າຂອງອານໂຕນ ຈຶ່ງປາກົດຮ່ອງຮອຍ ຄວາມບໍ່ສະບາຍໃຈອອກມາ.

-ຕາຍຮ່າແລ້ວ! ພວກເຮົາເສືອກມາຕົກໃສ່ ເກ-ເປ-ອູ ຊໍ້? ຜູ້ຄົນໃນເສື້ອແຂບແດງຊໍ້ພາກັນມາຫຸ້ມລ້ອມພວກເຮົາ, ໃຜຜູ້ຫນຶ່ງ ຮ້ອງໃສ່ຂ້າພະເຈົ້າວ່າ:

-ທໍາມະດາແລ້ວ ມັນກໍຕ້ອງເປັນແນວນີ້ລະ ກະຂອງວ່າເຈົ້າ ໃຫ້ເດັກນ້ອຍຂັບກວງນ ມັນຊິສາມາດຕຶງເຊືອກມ້າໄດ້ແນວໃດ? ເຈົ້າຄວນຊິຮັບຜິດຊອບເອງ.

ອານໂຕນ ເຮັດຫນ້າເບະກັດແຂ້ວອິດທົນຝັງ, ດ້ວຍນໍ້າຕາຜ່າ ຫນ່ວຍ ມັນສັ່ນຫົວໄປມາ ແລ້ວຕອບຜູ້ເຮັດໃຫ້ມັນເຈັບໃຈວ່າ:

ເກ.ເປ.ອູ* ອົງການຄຸ້ມຄອງການເມືອງແຫ່ງລັດ, ເຊິ່ງເມື່ອ ກ່ອນເອີ້ນວ່າ ເຊ.ກາ ແລະຕໍ່ມາປ່ຽນຊື່ມາເປັນ ເກ. ຈີ. ບີ

- ບັກຫລັ້ງກ່ຳທາງໃດ?

- ອ້າວກະໂຕອຸດຫັ້ນເດ້!

ພວກຜູ້ຊາຍໃສ່ເສື້ອຕິດປອກຍົດແຂບແດງທີ່ຄໍພາກັນຫົວໂຄບ ຂັ້ນ.

- ພວກເຈົ້າມາແຕ່ໃສ?

- ມາແຕ່ບ້ານກ້ອກກ! - ຂ້າພະເຈົ້າຕອບ.

- ອ່າ...ພວກເຈົ້າຢູ່ຫັ້ນຫວະຊັ້ນ! ແລ້ວເຈົ້າແມ່ນໃຜລະຜູ້ອຳນວຍການແມ່ນບໍ? ບໍ່ະອັນນີ້ຈ້ຳແມ່ນພວກເຮົາໂຊກດີສອງຊັ້ນດອກ ສັ້ນນີ້ນະ! ຊາຍຫນຸ່ມຄົນຫນຶ່ງເວົ້າທ້ວງຫົວ ແລ້ວກໍເອີ້ນເອົາຜູ້ອື່ນໆມາຫາ ທ້ວງຊຶ້ມມາທາງພວກເຮົາຄືກັບວ່າພວກເຮົາເປັນແຂກທີ່ມາຢ້ຽມຢາມຜູ້ຫນຶ່ງ.

ກຸ່ມຄົນຫລາຍເຕີບຕີວົງລ້ອມພວກເຮົາໄວ້ ທ້ວງເວົ້າຍອກໂຍ ນັກ ຂັບກວນຂອງພວກເຂົາເອງແລ້ວສໍ້ສົນ ອານໂຕເກີ່ງນິຄົມຢ່າງສົນ ລະວົນ.

- ພວກເຮົາຄຶດຢາກໄປຢາມນິຄົມພວກເຈົ້າແຕ່ດົນແລ້ວ, ໄດ້ ຍິນວ່າຢູ່ຟຸ້ນພວກເຈົ້າບຸກຢ່າງແຮງຊັ້ນຫວະ?

ແຕ່ໃນຂະນະນັ້ນ ຜູ້ຮັບຜິດຊອບເສດກະກິດກໍເຮັດຫນ້າຫຍຸ້ງມາ ພ້ອມດ້ວຍເຈ້ຍຮ່າງພ້ອງໃບຫນຶ່ງ, ມີຜູ້ຮ້ອງໃສ່ລາວວ່າ:

- ແມ່ນເຈົ້າວິນວາຍນຳເຈ້ຍສຫມຸ້ນີ້ເຮັດຫຍັງກະດໍ! ມັນມີປະ ໂຫຍດຫຍັງເກາະອັນເຈົ້າຂຽນໄວ້ຫັ້ນນະ?

- ເດັກນ້ອຍຊັ້ນເບາະ! ແຕ່ເຈົ້າກໍບໍ່ຄວນປ່ອຍໃຫ້ອຸດມາເລາະ ຫລົ້ນຢູ່ຕາມແຄມທາງແບບນີ້! ແຕ່ນີ້ເຈົ້າຊ້ຳປ່ອຍໃຫ້ບັກຫລັ້ງກ່ຳ ຫັ້ນຍ່າງລົ້ວໄປທົ່ວ...ແລ້ວມ້າຂ້ອຍມັນຊິອົດໄດ້ແນວໃດລະ!

-ເຈົ້າວ່າ "ຊີມີປະໂຫຍດ" ຫຍັງຊັ້ນຫວະ? ເຫັນບໍ່ວ່າພວກນັ້ຈດກາມກັບກອງນພວກເຮົາແບບໃດ? ໃຫ້ພວກເຂົາເອົາໄປແປງດງອນ້ີເດ້.

-ພວກເຂົາຊິເອົາໄປແປງໂດຍທີ່ເຈົ້າບໍ່ຕ້ອງຟ້ອງຮ້ອງເລີຍລະ... ແມ່ນບໍ? ເອົາລະເລົ່າສູ່ພວກເຮົາຟັງດີກ່ວາພວກເຈົ້າຢູ່ກິນກັນແບບໃດ, ຄືຈັ່ງວ່າພວກເຈົ້າບໍ່ມີຮອດຄອກຂ້ງຊັ້ນຫວະ?

-ພວກເຮົາຊິ້ຕ້ອງການມັນເຮັດຫຍັງ? ຫ້ອງຂ້ງນັ້ນ, ສ່ວນພວກເຈົ້າເດ້ ຍ້ງມີຢູ່ຫວະ? ອານໂຕນກາມຄືນ.

ອີກຄັ້ງຫນ່ຶ່ງ ທ່ີພວກຜູ້ຟ້ງພາກັນຫົວໂຄບຂ້ຶ້ນ:

-ວັນອາທິດຫນ້ານ້ີລະ ພວກເຮົາຊິໄປຢາມ ພວກເຈົ້າເອົາກອງນໄປແປງເດ້.

-ແລ້ວແຕ່ຫນ້ີຫາວັນທິດເດ້ ຊິໃຫ້ຂ້ອຍໃຊ້ຫຍັງລະ? ທ້ານຜູ້ຮັບຜິດຊອບເສດກະກິດອ້ອນວອນກາມ.

ຂ້ານ້ະເຈົ້າຈ່ຶ່ງບອກໃຫ້ລານອຸ່ນໃຈໄວ້ວ່າ:

-ພວກເຮົາຍ້ງມີກອງນເຫລ້ືມຫນ່ຶ່ງຫວ່າງຢູ່, ໃຫ້ຜູ້ໃດຜູ້ຫນ່ຶ່ງໄປເອົາກັບພວກເຮົາໂລດ.

ເປັນແນວນ້ີແລ້ວ ນິຄົມພວກເຮົາເລີຍໄດ້ເພ່ືອນມິດທ່ີດີໄວ້ຕ່ືມອີກ. ໃນວັນອາທິດຕ່ໍມາ ຊາວຫນຸ່ມກົມໂຊໂມນຄ້ຍເຊກາ ກໍໄດ້ມາຢ້ຽມຢາມນິຄົມພວກເຮົາ ແລະນ້ັນເປັນອີກຄ້ັງຫນ່ຶ່ງທ່ີມີການອະພິປາຍກັນເກ່ືງບັນຫາອັບປ້ໍຂ້ຶ້ນ. ເປັນຫຍັງເດັກນ້ອຍນິຄົມຈ່ຶ່ງບໍ່ສາມາດເປັນສະມາຊິກກົມໂຊໂມນໄດ້? ຊາວຫນຸ່ມເຊກາເຫັນດີເຫັນພ້ອມກັບພວກເຮົາຢ່າງເປັນເອກະສັນກັນ ຢ່າງເຫັນອົກເຫັນໃຈກັນດີ.

ຍ້ອນການເອົາໃຈໃສ່ຊ່ອຍ ທັ້ງຈາກຄະນະກຳມາທິການກະຊວງ ສຶກສາປະຊາຊົນ ແລະກະໂຕຫມູ່ເພື່ອນຢູ່ໃນເມືອງຂອງພວກເຮົາ ເອງນຳ, ຈຶ່ງມີການແກ້ໄຂບັນຫານີ້ຢ່າງໄວວາ ຈະເຈ້ງຢູ່ໃນຄະນະ ກຳມະການສູນກາງກົມໂຊໂມນ ອູກຣາອິນ ແລະໃນລະດູຮ້ອນປີ ໑໙໘໓ ຕິ[1]ຄອນແນສໂຕໂຣວິດ ໂກວານ ກໍ່ກັບມາເປັນຜູ້ອິບຣິມ ການເມືອງຢູ່ນິຄົມພວກເຮົາ.

ຕິຄອນແນສໂຕໂຣວິດ ເປັນຊາວຊົນນະບົດໄວ ໘໔ ປີ ແຕ່ມີ ປະສົບການຜ່ານບົດຮຽນຫນ້າສົນໃຈມາຫລາຍບັ້ນຫລາຍຕອນ ແລ້ວ ໂດຍສະເພາະກ່ຽວກັບການຕໍ່ສູ້ຊົນຊັ້ນຢູ່ໃນບ້ານປະຊາຊົນ, ລາວສະ ສົມບົດຮຽນທາງດ້ານການເຄື່ອນໄຫວການເມືອງໄດ້ຫລາຍ, ນອກນີ້ ລາວແກ່ຍັງເປັນຄົນສະຫລຽວສະຫລາດຄ່ຽວຄົມສຸຂຸມ ອີກດ້ວຍ. ນັບແຕ່ມື້ມາຮອດທຳອິດໂລດ ລາວເວົ້າກັບເດັກນ້ອຍແບບກັນເອງ ແລະຕິດຕໍ່ເທົ່າທຽມກັນ, ສະແດງຕົວວ່າເປັນຊາວນາຂັ້ນຊ່ຽວຊານ ບໍ່ວ່າຢູ່ກາງທົ່ງກໍ່ຄືບ່ອນໃດທີ່ສະແດງ.

ນັບແຕ່ນັ້ນມາ ຫນ່ວຍຊາວຫນຸ່ມທີ່ປະກອບດ້ວຍສະມາຊິກ ໓໐ ຄົນ ກໍ່ໄດ້ກຳເນີດຂຶ້ນຢູ່ໃນນິຄົມຂອງພວກເຮົາ.

ບົດທີ ๔๒

ພິທີໄຂບາດກ້າວແຫ່ງໄຊຊະນະ

ໃນທັນໃດນັ້ນ ເດຮູດເຊັນໂກ ກໍ່ເລີ່ມເວົ້າພາສາລັດເຊຍ, ເຫດການຝົນທຳມະຊາດຄັ້ງນີ້ເກີດຂຶ້ນຫລັງຈາກທີ່ອຸບັດເຫດອັນບໍ່ ຫນ້າອອນຊອນຫລາຍຢ່າງໄດ້ເກີດຂຶ້ນກັບຄອບຄົວຂອງເຂົາ. ທຳ

ອິດແມ່ນຍ້ອນເມຍລາວອອກລູກ, ຍິງຄົນນີ້ ສາມາດເວົ້າໄດ້ວ່າ ແມ່ນຄົນປະເພດບໍ່ສົນໃຈອອນຊອນຕໍ່ແນວຄຶດອຸດົມການ ຂອງຊາວ ອູກຣາອິນ ແມ່ນແຕ່ຫນ້ອຍດຽວ. ເຖິງແມ່ນວ່າ ເດຣູດເຊັນໂກ ເອງ ຕົ້ນຕັ້ນນຳການແຜ່ເຜົ່າວິໄຄດເຊື້ອສາຍເລືອດ ໂກລັກ ຜູ້ຊະນະເລີດ ແດ່ແລ້ວກໍຕາມ ແຕ່ສິ່ງດັ່ງກ່າວກໍຍັງບໍ່ສາມາດຢຸດຍັ້ງ ລາວໄດ້ດອກ. ດ້ວຍພາສາຂອງຊາວອູກຣາອິນແທ້ໆ ລາວຮຽກ ຮ້ອງເອົາມ້ານຳບຣາເຊັນໂກ ເພື່ອໄປຮັບເອົານາງແພດປະສູດລູກຜູ້ ຫນຶ່ງ. ບຣາເຊັນໂກນັ້ນອິດບໍ່ໄດ້ທີ່ຈະສະແດງຄວາມເຫັນຂອງຕົນ ບາງຢ່າງ ກ່ຽວກັບການເກີດຂອງບັກແອນ້ອຍ ເດຣູດເຊັນໂກ ທີ່ບໍ່ ຢູ່ໃນແຜນການຕາຕະລາງການຂົນສົ່ງຂອງນິຄົມ ສ່ວນການໄປຮັບ ເອົານາງແພດປະສູລູດກນັ້ນ ຕາມທັດສະນະຂອງຫມໍແລ້ວກໍເຫັນວ່າ "ເອົ້ນມາຫລໍ່ເອົ້ນມາ ມັນກໍຄືກັນຫັ້ນລະ" ເຖິງຢ່າງໃດຕໍ່ຕາມ ກໍ ໄດ້ຈັດແຕ່ງມ້າໃຫ້ ເດຣູດເຊັນໂກຢູ່ແຕ່ມື້ຕໍ່ມາ ຊ້ຳປາກົດວ່າ ຈຳ ເປັນຕ້ອງໄດ້ສົ່ງແມ່ນານໄປໃນເມືອງ. ອານໂຕນ ໂມໂຫຫລາຍ, ຈົນລືມຄຶດ ເຖິງຄວາມເປັນຈິງ, ຫມໍເວົ້າຂຶ້ນວ່າ:

-ຂ້ອຍບໍ່ຍອມໃຫ້ມ້າໄປດອກ!

ແຕ່ ແຊເຣີ ກັບຂ້າພະເຈົ້າພ້ອມດ້ວຍຜູ້ອື່ນໆສ່ວນຫລວງຫລາຍ ໃນນິຄົມ ພາກັນປະນາມທ່າທີຂອງມັນຢ່າງແຂງຂັນເດັດດ່ຽວຫລາຍ ຈົນມັນຕ້ອງຍອມເຮັດນຳ. ເດຣູດເຊັນໂກ ອິດທົນຟັງ ບຣາເຊັນ ໂກ ອະທິບາຍໃຫ້ເຫດໃຫ້ຜົນ ແລ້ວກໍຕອບໂຕ້ຄືນດ້ວຍຄຳເວົ້າ ຫລາກຫລາຍສຳນວນຕາມແບບຂອງລາວເປັນພາສາອູກຣາອິນສິດໆ ເພື່ອໃຫ້ອານໂຕນເຊື່ອໄປນຳວ່າ:

-ສະຫາຍບຣາເຊັນໂກ, ໃນເມື່ອວ່າບັນຫານີ້ຮຸງກຮ້ອງໃຫ້ແກ້ໄຂຢ່າງຮີບດ່ວນກໍບໍ່ຄວນເວົ້າກາຍຫນຶ່ງຊົ່ວໂມງ.

ອານໂຕນ ເວົ້າຄັດຄ້ານຄືນດ້ວຍຂໍ້ມູນເປັນຕົວເລກ ເພື່ອຕື່ມນ້ຳຫນັກໃຫ້ແກ່ພະລັງເຊື່ອຫມັ້ນຂອງຕົນວ່າ:

-ພວກເຮົາໃຫ້ມ້າສອງໂຕໄປຮັບນາງແພດແລ້ວແມ່ນບໍ? ຜ່ານໄປແລ້ວ... ແລ້ວຍັງໃຫ້ອີກສອງໂຕເພື່ອໄປສົ່ງລາວໃນເມືອງ... ແລ້ວ... ເຈົ້າຄຶດວ່າມ້າມັນສົນໃຈອອນຊອນນຳຊັ້ນຫວະ ວ່າໃຜຊິອອກລູກຫລືບໍ່ອອກຫັ້ນນະ?

-ໂອ້ວ... ສະຫາຍ...

-ບໍ່ມີ "ໂອ້ວສະຫາຍດອກ" ຄຶດເບິ່ງດຸວ່າ ມັນຊິເປັນແນວໃດ ຄັນວ່າຫມົດທຸກຄົນເຮັດແບບນີ້!...

ເພື່ອເປັນສັນຍານຄັດຄ້ານຂອງຫມໍ, ອານໂຕນ ຈົ່ງເອົາມ້າໂຕມັນຮັກຫນ້ອຍກ່ວາຫມູ່ ໄປທຽມໃສ່ກອງນສຳລັບໄປສົ່ງຜູ້ເຈັບທ້ອງອອກລູກ. ນັ້ນຄືມ້າແລ່ນຊ້ຳໂຕຂີ້ຮ້າຍກ່ວາ ຫມູ່, ນອກນັ້ຍງປະກາດອີກວ່າກອງນມ້າຢູ່ໃນສະພາບບໍ່ດີ ຈົ່ງຕ້ອງໃຊ້ກອງນກະບະແບບນີແປ້ນມ້ານັ່ງແທນແລ້ວໃຫ້ ໂຊໂຣກາ ຂັບ ທ້າຫນິດນີ ເພື່ອສະແດງວ່າການເດີນທາງຄັ້ງນີ ບໍ່ແມ່ນເລື່ອງສຳຄັນແຕ່ແນວໃດ.

ແຕ່ ບຣາເຊັນໂກ ໂມໂຫເປັນຟືນເປັນໄຟແທ້ໆກໍແມ່ນຕອນທີ່ ເດຣູດເຊັນໂກ ມາຂໍມ້າທຽມກອງນອີກຄັ້ງຫນຶ່ງ ເພື່ອໄປຮັບເອົາ ເມຍແມ່ລູກອ່ອນກັບມາບ້ານ. ເວົ້າແທ້ແລ້ວ ເດຣູດເຊັນໂກ ກໍ ຫາກຕັ້ງເປັນພໍ່ຄົນຜູ້ບໍ່ໂຊກດີເລີຍ, ລູກຜູ້ທຳອິດທີ່ເກີດມາແລ້ວ ລາວກໍພ້າວຕັ້ງຊື່ແບບອຸກຣາອົນໃຫ້ວ່າ ດາຣາສ ນັ້ນມີຊີວິດຢູ່ໂຮງຫມໍ

ບໍ່ຮອດອາທິດຊໍ້າ ແລ້ວກໍຕາຍລົງໂດຍບໍ່ທັນໄດ້ຕື່ມເຕີມສິ່ງສຳຄັນອັນ
ໃດໃຫ້ແກ່ປະຫວັດສາດ ປະຊາຊົນຊາວໂກຊັກຊໍ້າ. ໃບຫນ້າຂອງ
ເດຣູດເຊັນໂກ ສະແດງອາການຫງ່ອມເຫງົາຊົງທຸກຢ່າງກົງຕ້ອງກັບ
ສະພາບ, ສຽງເວົ້າໂຫນ້ອາດໃດອາດຫນ໋ໍ ແຕ່ກໍ່ບໍ່ມີຫຍັງຮ້າຍ
ແຮງເປັນພິເສດແຝງຊ້ອນຢູ່ໃນຄວາມຮູ້ສຶກເຈັບປວດຂອງລາວ ແລະ
ລາວກໍຍັງເວົ້າພາສາອຸກຣາອິນ ຕໍ່ໄປ. ກົງກັນຂ້າມກັບ ບຣາ
ເຊັນໂກ ເຊິ່ງໂມໂຫໂຫໂສສຸດຂີດ ແລ້ວນັ້ນ ຊໍ້າບໍ່ສາມາດຊອກຫາ
ຖ້ອຍຄຳເປັນພາສາໃດໆມາເວົ້າຄົງມີແຕ່ຄຳສັບຊະນິດຟ້າ ແລ້ວບໍ່ເຂົ້າ
ໃຈຫຍັງຫມົດເທົ່ານັ້ນ ຫລຸ່ງອອກຈາກປາກຂອງຫມໍ.

-ໃຫ້ມ້າໄປເມື່ອຍລ້າ! ຈ້າງລົດຂົນສົ່ງກະໄດ... ບໍ່ຟ້າວກະໄດ
ນ່າ... ຖ້າຈັກຫນ່ອຍກ່ອນ... ອອກລູກນັ້ນ ໃຜໆກະອອກໄດ້ດອກ
ຮອດຍາມນັ້ນແລ້ວ... ຊິມີຫຍັງ!

ເດຣູດເຊັນໂກ ພາເມຍແມ່ລູກອ່ອນຜູ້ເຄາະຮ້າຍກັບມາສູ່ຮັງຮັກ
ແລ້ວ ຄວາມທຸກທໍລະມານຂອງບຣາເຊັນໂກ ກໍ່ຈົ່ງຈາງຫາຍໄປຊົ່ວ
ໄລຍະຫນ໋ໍ. ນັບແຕ່ນັ້ນມາ ບຣາເຊັນໂກ ກໍ່ບໍ່ມີສ່ວນພົວພັນຢູ່ໃນ
ເລື່ອງອັນຫນ້າຫົນຫວຍນີ້ ແຕ່ວ່າເລື່ອງທັງຫມົດບໍ່ສຸດລົງຄ່ານີ້
ດອກ. ແອ້ນ ຕາຣາສ ເດຣູດເຊັນໂກບໍ່ທັນຖືກຳເນີດເກີດຂຶ້ນ
ໃນໂລກນີ້ເທົ່ອດອກ ແຕ່ມັນກໍໄດ້ເຂົ້າມາຫຍຸ້ງກ່ຽວກັບເຫດບ້າງເອີນ
ຢ່າງຫນ໋ໍ ເຖິງຢ່າງນັ້ນກໍຕາມໃນຂັ້ນຕໍ່ມາ ມັນກໍ່ບໍ່ໄດ້ເປັນຄົນແປກ
ຫນ້າສຳລັບເລື່ອງນີ້. ອຸບັດເຫດຄັ້ງນີ້ສ້າງຄວາມເຈັບປວດໃຫ້ແກ່
ເດຣູດເຊັນໂກສົມຄວນ.

ເລື່ອງມີຢູ່ວ່າ ພວກຄູສອນແລະພະນັກງານທັງຫມົດຂອງນິຄົມ

ນັ້ນ ກິນເຂົ້າຮ່ວມກັນຢູ່ໂຮງອາຫານຂອງນິຄົມ ແຕ່ຕໍ່ມາໄລຍະຫນຶ່ງ ເພື່ອຕອບສະຫນອງຂໍ້ຮຽກຮ້ອງສະເພາະຂອງຊີວິດຄອບຄົວ ທັງກໍຢາກຜ່ອນເບົາວຽກງານຄົວກິນລົງແດ່ ຂ້າພະເຈົ້າອະນຸຍາດໃຫ້ ກາລີນາ ອິວາໂນວິດ ເບີກຈ່າຍອາຫານບາງຊະນິດໃຫ້ພະນັກງານບາງຄົນເຊິ່ງໃນຈຳນວນນີ້ ກໍມີ ເດຣູດເຊັນໂກ ຮ່ວມຢູ່ນຳ. ຂ້າພະເຈົ້າເຄີຍມີໂອກາດໄດ້ຮັບນ້ຳມັນເບີຢູ່ໃນເມືອງເປັນບາງຄັ້ງ ແລະມັນກໍມີຢູ່ດ້ວຍຫນ້ອຍດຽວເທົ່ານັ້ນ ຄືພໍແຕ່ເອົາຂຶ້ນໂຕະກິນເຂົ້າໄດ້ບໍ່ພໍເທົ່າໃດນຶ່ງ ແນ່ນອນວ່າ ບໍ່ມີໃຜຄຶດຊວາດດອກວ່າ ນ້ຳມັນເບີຈຳນວນນີ້ ກໍຈັດເຂົ້າຢູ່ໃນອັດຕາເບີກຈ່າຍຕ່າງຫາກໃຫ້ແກ່ພະນັກງານ. ແຕ່ເດຣູດເຊັນໂກ ຈຸ່ນວາຍຮ້ອນຮົນຫລາຍເມື່ອໄດ້ຂ່າວວ່າ ອາຫານວິເສດເຍື່ອງນີ້ໄດ້ຂຶ້ນໄປລອຍຟູ່ຢູ່ໃນຈານເຂົ້າພວກເຮົາ ມື້ ມື້ແລ້ວເຂົາຈັດແຈງປ່ຽນບ່າແບກປືນ ຢ່າງພ້າວພັ່ງ, ຂຽນຫນັງສືລົງລາຍເຊັນຢັ້ງຢືນວ່າຈະກັບມາກິນເຂົ້າໂຮມຫມູ່ຢູ່ເຮືອນຄົວກາງ ແລະບໍ່ຢາກຮັບເບີກອັດຕາຕ່າງຫາກ. ໂຊກບໍ່ດີແທ້ໆ ພໍແຕ່ລາວເລີ່ມກັບເຂົ້າມາກິນນຳຫມູ່ ນ້ຳມັນເບີເຊິ່ງ ກາລີນາ ອິວາໂນວິດ ສະສົມໄວ້ກໍຫມົດກ້ຽງ, ດ້ວຍເຫດນີ້ເອງ ເດຣູດເຊັນໂກ ຈຶ່ງຖືເປັນເຫດຜົນແລ່ນມາຫາຂ້າພະເຈົ້າແລະປະທ້ວງຢ່າງຮຸນແຮງ.

- ເຈົ້າບໍ່ມີສິດມາເຮັດຢອກລ້ໍ້ແອ້ແບບນີ້ເດີ! ນ້ຳມັນເບີຢູ່ໃສ ?

- ນ້ຳມັນເບີຫມົດແລ້ວ, ກິນໄປຫມົດແລ້ວເດ້.

ເດຣູດເຊັນໂກ ຂຽນໃບສະເຫນີໃຫມ່ວ່າ ທັງເຂົາແລະຄອບຄົວຢາກຮັບເບີກອັດຕາອາຫານຕ່າງຫາກຄືແຕ່ກ່ອນ. ເອົາໂລດແຫລ້ວ! ຂ້າພະເຈົ້າບອກ ແຕ່ສອງມື້ຕໍ່ມາ, ກາລີນາ ອິວາໂນວິດ ຊ້ຳໄດ້ນ້ຳ

ມັນເປີນແລະມີແຕ່ຫນ້ອຍດຽວເທົ່ານັ້ນ. ເດຮູດເຊັນໂກ ກັດແຂ້ວ ກັດຄາງ ເພື່ອຜ່ານຜ່າຂໍ້ທົດສອບອັນນີ້ໂດຍບໍ່ຂໍມັນມາກິນຢູ່ເຮືອນ ຄົວກາງ. ແຕ່ປາກົດວ່າມີສິ່ງໃດສິ່ງຫນຶ່ງ ອຸບັດຂຶ້ນຢູ່ໃນແວດວົງພະ ແນກສຶກສາປະຊາຊົນ ຂອງເຮົານັ້ນຄື ນັບແຕ່ນັ້ນມາເພິ່ນໄດ້ເລີ່ມ ສົ່ງນ້ຳມັນເປີໃຫ້ພະນັກງານພວກເຮົາເປັນລະຍະໆ. ບັດນີ້ເກືອບ ທຸກຄັ້ງທີ່ ກາລິນາ ອິວາໂນວິດ ກັບມາແຕ່ໃນເມືອງ ລາວຈະດຶງກະ ປຸກດິນໃສ່ນ້ຳມັນເປີສີງາມສະອາດອອກມາຈາກບ່ອນນັ່ງປຸກຫນຶ່ງ. ຈົນວ່າໃນທີ່ສຸດ ກາລິນາ ອິວາໂນວິດ ບໍ່ໄດ້ໄປໃນເມືອງແບບບໍ່ເອົາ ກະປຸກນ້ີໄປນຳຈັກເທື່ອ, ສ່ວນຫລວງຫລາຍແລ້ວ ປຸກຫນ່ວຍ ນ້ີຈະກັບຄືນມານິຄົມໂດຍບໍ່ມີຫຍ້ງຮາດຫນ້າມາເລີຍ ແລະກາລິນາ ອິວາໂນວິດ ກໍຈະໂຍນມັນລົງໃສ່ເຟືອງຮອງພື້ນກະບະກວງນຢ່າງບໍ່ ສົນໃຈແລ້ວເວົ້າວ່າ:

-ສຳລັບພວກຂາດສະຕິຫມູ່ນີ້ມັນກໍເປັນແນວນ້ີແລ້ວ! ໂອ້ຍ ຢ່າງຫນ້ອຍກໍຄວນຊິເອົາຫຍັງໃສ່ໃຫ້ຈັກຫນ້ອຍ ພໍຄືພໍຫລຽວເຫັນ ກໍຍັງດີນ່າ, ແຕ່ມັນບໍ່ເອົາຫຍັງໃຫ້ເລີຍ. ຜາກເອີຍ! ເລຍກໍບໍ່ຂໍອ ລ້ືຈ້ຳດີນກໍບໍ່ໄດ້ຮອດກິ່ນ!

ແຕ່ເດຮູດເຊັນໂກ ອົດບໍ່ລົນທົນບໍ່ໄດ້ ອີກແລ້ວ ລາວຫວນ ກັບຄືນມາກິນໂຮມຫມູ່ຢູ່ຄົວກາງອີກຄັ້ງຫນຶ່ງ. ແຕ່ວ່າຄົນຜູ້ນ້ີບໍ່ສາ ມາດຕິດຕາມ ການເປັນໄປຂອງຊີວິດໃນແຕ່ລະມ້ືໄດ້ເລີຍ, ລາວບໍ່ ສັງເກດເຫັນຮອດວ່າເສັ້ນຕຳລາບໍລິໂພກທາດໄຂມັນຢູ່ໃນນິຄົມພວກ ເຮົາສູງດ່ຶ້ນນຳທຸກມ້ືຢູ່ແລ້ວແລະຍ້ອນວ່າລະດັບ ການເມືອງບໍ່ຂະ ຫຍາຍຕົວເທົ່າທີ່ຄວນ ລາວຈຶ່ງບໍ່ເຂົ້າໃຈວ່າ ມາຮອດຂັ້ນໃດຂັ້ນ

ຫນ໋ຳນັ້ນ ປະລິມານຕ້ອງຫັນປ່ຽນມາເປັນຄຸນນະພາບ. ໄລຍະຂ້ານ
ຜ່ານດ່ຳກ່ອນນີ້ ບ້ຳເອີນ ຕົກກົກສະມາຊິກໃນຄອບຄົວຂອງລາວພໍ
ດີ. ບໍ່ດົນບໍ່ນານຫຍ້ງພວກເຮົາກໍໄດ້ຮັບ ອັດຕານ້ຳມັນເບ໋ຫລາຍຂຶ້ນ
ເຫລືອກົນຈົນຂ້າພະເຈົ້າເຫັນວ່າສາມາດເບ໋ກຈ່າຍເປັນອັດຕາໃຫ້ພະ
ນັກງານໄດ້ໃນເວລາ ໑໕ ມື້ທ່ໍຜ່ານມາ. ພວກລູກເມຍແມ່ເກ໋ົ້າ
ແມ່ຍ່າ ແລະຜູ້ອ່ືນໆທ່ໍມ໋ີຄວາມສຳຄັນຂັ້ນສຳຮອງທ້ັງຫລາຍພາກັນ
ມາຮັບເອ໋ົາເບ໋ົ້ອນນ້ອຍໆສ໋ີເຫລືອງອ່ຍຮ່ຍຈາກ ກາລິນ ອ໋ີວາໂນ
ອ໋ດ ຫລ້ງຈາກທ່ໍຕ້ອງທົນຄອງຄອຍມາດົນນານ ແຕ່ໃນບຸກຄົນ
ເຫລ່ົານ໋ີ ບ໋ໍ່ມ໋ ເດຣ໋ກເຊ້ນໂກ: ໂດຍບ໋ໍ່ຮູ໋ສ໋ກຕ໋ົວວ່າ ເຂ໋ົາໄດ້ບ໋ໍລ໋ິໂພກ
ອັດຕາທາດໄຂມັນໃນຮູ໋ບແບບທ່ໍ່ບ໋ໍ່ອາດວ໋ັດແທກໄດ້ ແລະບ໋ໍ່ຫນ້ານ໋ົ້ວ
ດ໋ົ້ມແຕ່ຢ່ານ໋ໃດຢ່ໍ່ໃນອາຫານຂອງພວກເດ໋ກນ້ອຍ. ໃບຫນ້າຂອງເຂ໋ົາ
ມ໋ານເມ໋ົ້ນໄປດ໋ວ້ຍຄວາມທຸກໃຈແລະເຄ໋ຽດແ໋ຄ້ນ ທ່ໍ່ເຈ໋ດຕະນາພາໂລ
ກະທຳໃສ່ໂຕເຂ໋ົາ. ດ໋ວ້ຍຄວາມງ໋ົງວ່ານ໋ົ້ອເມ໋ົ້ົ ບ໋ໍ່ຮູ໋້ຈະເຮ໋ັດແບບໃດ
ດ໋ີ ເຂ໋ົາຈ໋ົ່ງເຮ໋ັດໃບສະເຫນ໋ີ່ອ໋ກເທ໋ົ່ອໃຫມ່ ເພ໋ົ່ອຂ໋ໍ່ຮ໋ັບອັດຕາສ່ວນຕ໋ົວ
ຄ໋ືນ. ຄວາມທຸກທໍລະມານຂອງເຂ໋ົາເ໋ລ໋ິກແລ໋ບຫລາຍ ແລະກະຕຸ້ນ
ໃຫ້ທຸກຜູ໋້ທຸກຄົນເຫ໋ັນອ໋ກເຫ໋ັນໃຈເຂ໋ົາ ແຕ່ເຂ໋ົາຊ໋ໍ້ບ໋ໍ່ຍອມປ່ຽນແປງ
ໂຕເອ໋ງແ໋ກມ໋ຍ້ງປະພ໋ຶດຕ໋ົນແບບຄົນໂກ໋ຊ໋ກ ແລະບ໋ໍ່ຍອມເ໋ຊ໋ົາເວ໋ົ້ົາ
ພາສາ ອຸ໋ກຣ໋ອ໋ນ໋ນ໋ັ້ນ໋ຈ໋ັກເທ໋ົ່ອ.

ມ໋ານ໋ຮ໋ອດເວລານ໋ັ້ນ ເ໋ລ໋ົ່ອງທາດໄຂມັນໄດ້ມ໋ານ໋ປະສານ໋ກ໋ົງກ໋ັບເວລາ
ທ໋ົ່ ເດຣ໋ກເຊ້ນໂກ ພວມ໋ອ໋ກແຮງດ໋ົ້ນຣ໋ິນຢ່າງຫນ້າເ໋ວ໋ດທະນາ
ເພ໋ົ່ອຢ່ານ໋ກ໋ລ໋ົບຕ໋ໍ່ສ໋ ້ົ້ງຫນ໋ໍ່ແນວຂອງຕ໋ົນ.

ເຂ໋ົາກ໋ັບເມ໋ຍສ໋ ້ົູ້້ທ໋ົນຫ໋ວນລ໋ໍ້ລ໋ົກເ໋ກ໋ົ້ງຄວາມ໋ຊ໋ອ໋ກຊ໋ ້ົ້ໍ ກ໋ ່ງ໋ວ໋ກ໋ັບ໋ບ໋ັກ

ແອ້ອຍ ຕາຣາສ ຢ່າງຫນ້າສົງສານແລະເມື່ອ ຊາຕາກໍ ຊັກນໍາໃຫ້ ຊ້ຳຊ້ຳໃຫ້ຄວາມຄຸ່ນຄ່ຽງແລ້ວ ເດຣູດເຊັນໂກ ກໍຈຶ່ງໄດ້ຊຶ່ນຊົມອອນ ຊອນໃຈນໍາຮ່າງວັນທີ່ຄວນໄດ້ຮັບ ແຕ່ເທົ່ານານແລ້ວນັ້ນກໍ່ຄື: ອັດ ຕາເບີກຈ່າຍສໍາລັບ ໑໕ ວັນກ່ອນເຊິ່ງກໍ່ກຍົກຂຶ້ນມາເປັນບັນຫາປະ ຈໍາວັນຂອງນິຄົມ, ອີກຄັ້ງຫນຶ່ງເບີທໍາມະດາໄດ້ກາຍມາເປັນສ່ວນ ປະກອບຂອງອັດຕາເບີກຈ່າຍວັນນີ້ນໍາ! ທ້າວເດຣູດເຊັນໂກ ຜູ້ຝັນດີ ມາຫາ ກາລິນາ ອີວາໂນວິດ ພ້ອມດ້ວຍກະຕ່າໄປຕະຫລາດຫນ່ວຍ ຫນຶ່ງ. ວັນນັ້ນແດດງາມໃສສ່ອງດີລັບພະລັ່ງທ້າປວງທົ່ວຊົ່ວດ້ວນ ແຕ່ເບີກບານມ່ວນຊຶ່ນອອນຊອນ ແຕ່ວ່າສິ່ງທ້າງຫນົດນີ້ບໍ່ຢັ້ງຢືນ ເລີຍ. ປະມານເຄິ່ງຊົ່ວໂມງຕໍ່ມາ ເດຣູດເຊັນໂກ ກໍແລ່ນຕາຕື່ມາ ຫາຂ້າພະເຈົ້າ ທ່າທີໂມໂຫເຈັບແຄ້ນຈົນຮອດກະດູກ. ບັດນີ້ຫົວ ຫົກໃຫຍ່ແຂງແຮງຂອງເຂົາບໍ່ສາມາດຮອງຮັບບາດ້ອນຕີຫນໍ່ໜ້ຳ ໂຊກຊາຕາບັນດານໃສ່ໂຕເຂົາແລ້ວ, ເວົ້າພາສາລັດເຊຍສິດໆອອກ ມາຢ່າງລ່ຽນໄຫລ ຄ້າຍຄືກັນກັບລິດໄຟທ້າຂະບວນຟ້າສະເດັນອອກ ຈາກລາງ ກ້ຽເຫລັກຂອງມັນຢຽບແລ່ນໄປລຸດໆຕາມໄມ້ຫມອນ.

- ເປັນຫຍັງຈຶ່ງບໍ່ເບີກອັດຕານໍ້ມັນເບີໃຫ້ລູກຊາຍຂ້ອຍ?

- ລູກຊາຍຜູ້ໃດ? - ຂ້າພະເຈົ້າຖາມຄືນຢ່າງປະຫລາດໃຈ.

- ບັກແອ ຕາຣາສ ຫັ້ນເດ້ ຊິຜູ້ໃດອີກ! ເຮັດແບບນີ້ມັນແບບ ພະລາການເດ້ ສະຫາຍ ຜູ້ອໍານວຍການເອີ້ຍ! ສະມາຊິກແຕ່ລະຄົນ ໃນຄອບຄົວຕ້ອງໄດ້ຮັບເບີກອັດຕາຂອງເຂົາ. ສັ່ງຈ່າຍມາໃຫ້ດີໆສາ!

- ແຕ່ເຈົ້າບໍ່ມີລູກຊາຍຊື່ ຕາຣາສ ແລ້ວເດ້!

- ນັ້ນມັນບໍ່ແມ່ນກິດທຸລະ ອີຫຍັງຂອງເຈົ້າ ມັນຊິຢູ່ຫລືບໍ່ຢູ່ກໍ

ດາຍ. ຂ້ອຍເຄີຍເອົາໃບຢັ້ງຢືນມາແຈ້ງເຈົ້າແລ້ວວ່າ ລູກຊາຍ ຕາຣາສ ຂອງຂ້ອຍເກີດເມື່ອວັນທີ ๘ ມີຖຸນາ ແລະຕາຍວັນທີ ๑๐ ມີຖຸນາ. ຈັ່ງຊັ້ນ ເຈົ້າຕ້ອງເບີກອັດຕານ້ຳມັນເບີໃຫ້ມັນ ๒ ມື້...

ກາລີນາ ອີວາໂນວິດ ໂປໂລເຂົ້າມາໂດຍເຈດຕະນາ ເພື່ອຕິດຕາມສະພາບການ, ລາວດຶງແຂນສອກ ເດຮູດເຊັນໂກ ຢ່າງລະມັດລະວັງ ແລ້ວເວົ້າວ່າ:

-ສະຫາຍ ເດຮູດເຊັນໂກ ເອີ້ຍ! ບໍ່ມີໃຜປ່ວງບ້າ ເກີ່ງກັບຊິເອົານ້ຳມັນເບີໄປໃຫ້ເດັກນ້ອຍເກີດໃຫມ່ແນວນັ້ນກິນດອກ. ຄຶດເບິ່ງຕີ... ເດັກນ້ອຍໆມັນຊິຢ່ອຍອາຫານປະເພດນີ້ໄດ້ຊັ້ນຫວະ?

ຂ້າພະເຈົ້າເສືອກແສງຕາເບິ່ງພວກເຂົາທັງສອງທັງຕົກຕະລຶງ.

-ກາລີນາ ອີວາໂນວິດ! ແມ່ນພວກເຈົ້າເປັນຫຍັງກັນຫນິດເກາະມື້ນະ! ເດັກນ້ອຍນັ້ນມັນຕາຍໄປຕັ້ງສາມອາທິດແລ້ວເດ້.

-ອ່າ... ແມ່ນຕິ... ມັນຕາຍແລ້ວໃດ໋ເນາະ? ແລ້ວຊັ້ນເຈົ້າຊິຕ້ອງການຫຍັງລະ? ນ້ຳມັນເບີບໍ່ສາມາດຊ່ວຍຫຍັງມັນໄດ້ອີກແລ້ວ, ເຊັ່ນດຽວກັນກັບຫຸ່ນຫຽນບໍ່ສາມາດຊ່ວຍຫຍັງຜູ້ຕາຍໄດ້ນັ້ນແລ້ວ... ໂອ່... ແຕ່ວ່າມັນແມ່ນຜູ້ຕາຍແທ້ໃດເນາະ. ຄັນວ່າຂ້ອຍເວົ້າບໍ່ຜິດໃດ໋...

ເດຮູດເຊັນໂກ ຍ່າງວົນວຽນໄປມາໃນຫ້ອງພໍປານເສືອຕິດຈັ່ນ. ແລ້ວຍົກກຳປັ້ນຂຶ້ນຟາດອາກາດໄປມາຮ້ອງວ່າ:

-ຕະຫລອດໄລຍະ ๒ ວັນ ມັນເປັນສະມາຊິກຄອບຄົວຂ້ອຍຢ່າງຖືກຕ້ອງຕາມກົດຫມາຍຈັ່ງຊັ້ນພວກເຈົ້າຕ້ອງເບີກອັດຕາໃຫ້ມັນ!

ກາລີນາ ອີວາໂນວິດ ພະຍາຍາມອົດກັ້ນຮອຍຍິ້ມໄວ້ຢ່າງລຳ
ບາກ ແລ້ວອະທິບາຍວ່າ:

- ຢ່າງກືກຕ້ອງຕາມກົດໝາຍວ່າຕໍ? ອັນນັ້ນແມ່ນວ່າກັນຕາມ
ທິດສະດີຊຸ່ງດອກ ແຕ່ໃນຄວາມຈິງ, ບໍ່ມີຫຍັງຫນິດ... ແມ່ນມັນ
ຈະເຄີຍມີຕິວຕົນຢູ່ໃນໂລກນີ້ ມາແລ້ວຫລືບໍ່ກໍຕາມ... ບັດນີ້ບໍ່ມີຫຍັງ
ແຕກຕ່າງກັນແລ້ວ.

ແຕ່ ເດຮູດເຊັນໂກ ເສຍຫລັກໝາຍອອກຈາກທາງລົດໄປ
ແລ້ວ ກິລິຍາທ່າທີຂອງເຂົາໃນຂັ້ນຕໍ່ມາ ບໍ່ຢູ່ໃນລະບົບລະບຽບໃດ
ເລີຍ. ມັນສັບສົນແລະຫນ້າອັບອາຍພຶລຶກ. ເຂົາສູນເສຍເອກະລັກ
ພາຍນອກທຸກຢ່າງກະທັ່ງຮອດລັກສະນະຂົດງໍ່ງໃນຕິວອັນເປັນຈຸດພິ
ເສດຢູ່ໃນບຸກຄະລະພາບກໍມາຍມ້ວງແລະຍຽດແຂງອອກ ເຊັ່ນຫນວດ
ເຫນືອຣິມສົບ, ຜົມຍາວລະບ່າ, ຜ້າກາລະວັດ. ຂະຫນາດວ່າຢູ່
ໃນສະພາບແບບນີ້ແລ້ວ ເຂົາຍັງແລ່ນໄປຮອດຫ້ອງການຂອງຜູ້ກວດ
ກາພະແນກສຶກສາປະຊາຊົນ ເຮັດໃຫ້ຝ່າຍນີ້ຮູ້ສຶກອະເຫຍື້ອງເປັນ
ທີ່ສຸດ. ເພິ່ນເອີ້ນຂ້າພະເຈົ້າໄປຫາ ແລ້ວບອກວ່າ:

- ຄູສອນເຈົ້າຜູ້ຫນຶ່ງແລ່ນມາຟ້ອງຂ້ອຍ ເຈົ້າຮູ້ບໍ່ວ່າຄວນເຮັດ
ແນວໃດ? ຄົນແບບນີ້ຫາດາໄລ່ຫນີໂລດເດ້. ເຮັດແນວໃດເຈົ້າຈຶ່ງ
ຮັບເອົາຄົນບ້າໆບໍ່ໆບໍ່ມີສະຕິແນວນີ້ຢູ່ນຳໄດ້? ບໍ່ຈັກວ່າມັນໄປເວົ້າອີ່ຫຍັງ
ແດ່ໃຫ້ຂ້ອຍຟັງ... ກ່ຽວກັບຫນໍ ຕາຮາສ, ນ້ຳມັນເບີ, ແລ້ວຈັກ
ຫຍັງຕໍ່ຫຍັງອີກ...

- ແຕ່ແມ່ນທ່ານເອງເດ້ ທີ່ສົ່ງເຂົາໄປ.

- ເປັນໄປບໍ່ໄດ້ຕິ! ໄລ່ອອກໂລດ!

ນີ້ຈ້ຳແມ່ນຫມາກຜົນຫນ້າອອນຊອນ ທີ່ໄດ້ຮັບຈາກປັດໃຈຕົ້ນ
ເຫດສອງອັນຄື ຕາຮາສ ແລະນ້ຳມັນເບີ. ເດຮູດເຊັນໂກ ກັບເມຍ
ຈຳຕ້ອງເດີນໄປຕາມທາງເສັ້ນດຽວກັບ ໂຣດົນຊິກ. ຂ້າພະເຈົ້າດີໃຈ
ແລະພວກເດັກນ້ອຍເອງກໍພໍໃຈ, ແລະແລ້ວ ຜົນແຜ່ນດິນອູກຣາ
ອິນ ຕອນນ້ອຍໆແຫ່ງຫນຶ່ງຊ້ຳນອນຢູ່ໃນວິງລັດສະຫມີຂອງເຫດ
ການທີ່ພວກເຮົາກຳລັງເວົ້າຮອດນີ້ກໍ່ອົ່ມອີກອົ່ມໃຈຄືກັນ. ຈະຫາຄົນ
ແທ້ຈິງມາແຕ່ໃສ? ເຖິງປານນັ້ນກໍຕາມ ຂ້າພະເຈົ້າຍັງຮູ້ສຶກວິຕົກກັງ
ວົນເຈືອປົນຢູ່. ບັນຫານີ້ບັນຫາດຽວຕິດຕາມຂ້າພະເຈົ້າຢູ່ບໍ່ວາງ ບໍ່
ຜິດຫຍັງກັບມິດຈ໌ຄໍຫອຍ ເພາະບັດນີ້ຢູ່ນິຄົມໃຫມ່ບໍ່ເຫລືອຄູສອນ
ຈັກຄົນເລີຍ: ແຕ່ມັນຫາກເປັນໄປແນວນີ້ລະ, ໂຊກດີຍັງເຂົ້າຂ້າງນິ
ຄົມກ້ອກກີແທ້ໆ ໂດຍບັງເອີນທີ່ສຸດ ເຂ້າພະເຈົ້າໄດ້ພົບຄົນທີ່ສອດ
ຄ່ອງຕາມຄວາມຮຽກຮ້ອງຕ້ອງການຂອງພວກເຮົາ. ມື້ນັ້ນເຂົາພວມ
ຢືນຢູ່ແຄມທາງຕໍ່ຫນ້າແຈ່ນແກ້ວຂອງຕົກ ພະແນກສຶກສາປະຊາຊົນ
ແຕ່ຫັນຫລັງໃສ່ຕົກ ເພື່ອແນມເບິ່ງເຫດການເລັກນ້ອຍໆທີ່ເກີດ
ຂຶ້ນເທິງກະຫນົນອາບຝຸ່ນ ແຫລ່ງຮົກເຮ້ຮ້ອງເສດເຟືອງແຫ້ງ.
ອານໂຕນ ກັບຂ້າພະເຈົ້າຊ່ອຍກັນຂົນແປ້ງອອກມາ ຈາກຮ້ານຄ້າ,
ອານໂຕນກ້າວກ້ອຍຫລັງຕີນພະລາດຕົກຂຸມ ແລ້ວລົ້ມລົງ. ຊາຍ
ຫນຸ່ມທີ່ຄົນແທ້ຄົນຈິງຜູ້ນີ້ຟ້າວແລ່ນມາຊ່ອຍ ເທິງທີ່ເທິງບ່ອນໂລດ
ຈາກນັ້ນເຂົາກັບຂ້າພະເຈົ້າກໍຊ່ອຍກັນຫາມໄກ່ແປ້ງຂອງ ອານໂຕນ
ຂຶ້ນມາໃສ່ກວຽນ, ຂ້າພະເຈົ້າຂອບໃຈຊາຍແປກຫນ້າພ້ອມດຽວກັນ
ກໍຮູ້ສຶກສົນໃຈໃນທ່າທີຫ້າວຫັນກຽມຕົວພ້ອມສະເຫມີຂອງເຂົາ.
ໃບຫນ້າຂອງເຂົາບົ່ງບອກວ່າດສະຫລາດສະຫລຽວທັ້ງໆ ທີ່ຢູ່ໃນໄວ

ຫນຸ່ມສົມຄວນ ແມ່ນແຕ່ຮອຍຍິ້ມກໍສະຫງ່າຫນ້າເບິ່ງ, ທ່າທີທີ່ເຂົາ ຕອບຄໍາຂອບໃຈຂອງຂ້າພະເຈົ້ານັ້ນ ເປັນທີ່ຕິດໃຈຂ້າພະເຈົ້າຫລາຍ. ຊາຍຫນຸ່ມໃສ່ຫມວກອ່ອນສີຂາວເຜີຍໃຫ້ເຫັນຊົງຜົມສັ້ນແບບທະ ຫານຢ່າງຈະແຈ້ງ.

- ເຈົ້າເປັນທະຫານແມ່ນບໍ?

- ເຈົ້າຕອງຖືກແລ້ວ! ຊາຍແປກຫນ້າຕອບທັງຍິ້ມ.

- ເປັນທະຫານມ້າຫລະ?

- ເຈົ້າ!

- ຊັ້ນມີຫຍັງຢູ່ໃນພະແນກສຶກສານີ້ເປັນທີ່ສົນໃຈຂອງເຈົ້າ?

- ແມ່ນກະໂຕຜູ້ອໍານວຍການເອງ, ເພິ່ນບອກຂ້ອຍວ່າບໍ່ດົນ ຈະມາ. ຂ້ອຍຄອງຖ້າເພິ່ນ.

- ເຈົ້າມາຊອກວຽກຊຸນຫລະ?

- ເຈົ້າແມ່ນແລ້ວ, ເພິ່ນວ່າມີວຽກສໍາລັບຂ້ອຍ, ວຽກປະເພດ ຄູສອນກາຍະກໍານັ້ນນ່າ.

- ຊັ້ນມາລົມກັບຂ້ອຍກ່ອນດຸ.

- ກະດີຄືກັນ.

ແລ້ວພວກເຮົາກໍລົມກັນ. ເຂົາປົ້ນຂຶ້ນຂີ່ກ່ອງນໍາພວກເຮົາ ແລ້ວພວກເຮົາຈຶ່ງພາກັນເດີນທາງກັບນິຄົມ. ຂ້າພະເຈົ້າພາ ປີອິດ ອີວານໂນວິດ ຍ້ອນຊົມນິຄົມ ແລ້ວຈັດການແກ້ບັນຫາກ່ຽວກັບການ ແຕ່ງຕັ້ງເຂົາໃນຕອນແລງມື້ດຽວກັນນັ້ນເອງ.

ປີອິດ ອີວານໂນວິດ ມີຄຸນສົມບັດອັນດີຢູ່ໃນຕົວຂອງເຂົາຢ່າງ ພ້ອມພຽງສໍາລັບຢູ່ນິຄົມຂອງພວກເຮົາ. ເຂົາມີທຸກຢ່າງທີ່ເຫມາະ

ສົມເຊັ່ນຄວາມຫນຸ່ມແຫນ້ນ, ທ່າທີສະຫງ່າງາມ, ຄວາມເຂັ້ມ
ແຂງທົນທານປານເຫລັກ, ຄວາມເຄັ່ງຂຶມຈິງຈັງ ບໍ່ມີທ່າທີສົງໄສ
ແບບອະຄະຕິກ່ຽວກັບຫລັກວິຊາຄູແມ່ນແຕ່ເມັດດຽວ, ຕໍ່ຫນ້າເດັກ
ນ້ອຍ ເຂົາບໍ່ສະແດງຄວາມອ່ອນແອ ໂຍະຍານແລະບໍ່ມີການສວຍໃຊ້
ໂອກາດ ແບບເຫັນແກ່ໂຕເລີຍ. ນອກນີ້ເຂົາຍັງມີຄຸນສົມບັດອື່ນໆ
ອີກ: ປິອີດ ອີວາໂນວິດ ມັກການເຝິກແອບທະຫານເປັນຊີວິດຈິດ
ໃຈ, ຮູ້ຈັກຫລົ້ນເປຍໂນ, ມີພອນສະຫວັນເລັກໆນ້ອຍໆໃນເລື່ອງ
ກະວີ ແລ້ວກະມີກຳລັງກາຍຢ່າງມະຫາສານນຳອີກ, ພໍແຕ່ນິຄົມໃຫມ່
ຕົກຢູ່ໃນການບັນຊາຂອງເຂົາໄດ້ສອງມື້ເທົ່ານັ້ນ ມັນກໍມີສີສັນໃຫມ່
ໂລດ. ດ້ວຍການຍອກເວົ້າແບບຍົ້ມຫົວແດ່ ຄຳສັ່ງແດ່ ການເວົ້າ
ສຸດສີແດ່ ປິອີດ ອີວາໂນວິດ ກໍສາມາດເຕົ້າໂຮມເດັກນ້ອຍໃຫ້
ເຂົ້າກັນເປັນອັນຫນຶ່ງອັນດຽວກັນ. ນອກຈາກບໍ່ມີຄວາມສົງໄສແມ່ນ
ແຕ່ຫນ້ອຍດຽວຕໍ່ຫລັກການວິຊາຄູຂອງຂ້າພະເຈົ້າເທົ່ານັ້ນ ເຂົາຍັງ
ມີຄວາມສັດທາຕື່ມໃສ່ອີກ ອັນເຮັດໃຫ້ພວກເຮົາເວັ້ນຈາກການຂັດ
ແຍ່ງ ແລະການໂອ້ລົມກ່ຽວກັບຫລັກວິຊາຄູແບບລົມໆແລ້ງໆນັ້ນນຳ
ອີກ.

ຊີວິດຢູ່ໃນນິຄົມທັງສອງດຳເນີນໄປຕາມເສັ້ນທາງກຳນົດແບບ
ດຽວກັນແລ້ວ. ສຳລັບຂ້າພະເຈົ້າເອງແລ້ວຮູ້ສຶກວ່າເກີດມີຄວາມສາ
ມັກຄີຫນັກແຫນ້ນແບບໃຫມ່ຢ່າງຫນຶ່ງແລ້ວ. ມີຄົນ ແນສເຕໂຣ
ວິດ, ແຊເຣີ ແລະ ປິອີດ ອີວາໂນວິດ ໂຮມທັງພວກຄູ ຮຸ່ນບຸກ
ເບີກ ພ້ອມພາກັນຮັບໃຊ້ພາລະກິດຂອງພວກເຮົາຢ່າງແທ້ຈິງ.

ເວລານັ້ນຈຳນວນພົນຂອງພວກເຮົາມີເກົ້າ ຊາວ ແລ້ວ, ສະ

ມາຊຶກເດີມໃນຊຸມປີ ໑໙໘໐ ຫາ ໑໙໘໑ ນັ້ນປະກອບຕີ້ອເປັນ ກຸ່ມຫນັກແຫນ້ນແທ້ໆ ມີອິດທິພົນຕໍ່ຊາວນິຄົມໂດຍກົງ, ສຳລັບຜູ້ ມາໃຫມ່ນັ້ນ ແຕ່ລະນາທີ ພວກເຂົາໄດ້ພົບວ່າພວກຮຸ່ນເກົ່າເປັນຄື ໂຄງຮ່າງເຫລັກແຂງກັ້ນ ເຊິ່ງໃນຕີ້ອຈິງເກືອບເວົ້າໄດ້ວ່າບໍ່ອາດມີໃຜ ຕ້ານຍັ້ນໄດ້. ຂ້າພະເຈົ້າສັງເກດໄດ້ວ່າ ບໍ່ໄດ້ມີຄວາມພະຍາຍາມ ຕ້ານທານສູ້ຍັ້ນໃດໆເລີຍ. ນິຄົມເອງປະທັບຮ່ອງຮອຍໃສ່ຜູ້ມາໃຫມ່ ຢ່າງແຂງຂັ້ນດ້ວຍຄວາມດຶງດູດຈາກຮູບການພາຍນອກ, ດ້ວຍ ຄວາມຄັກແນ່ແລະຄວາມງ່າຍດາຍຂອງລະບຽບໃນຊີວິດ, ດ້ວຍການ ສະເຫນີຮີດຄອງປະເພນີອັນມີສະເຫນຫນ້າຫລົງໃຫລ ຂອງມັນຈົ່ງ ແມ່ນແຕ່ກະໂຕນັກຮຽນຮຸ່ນອ້າຍເອງ ກໍລືມກົກເຄົ້າເຫົ້າເດີມຂອງ ມັນໄປແລ້ວ. ພັນທະຂອງນັກຮຽນແຕ່ລະຄົນສຳແດງອອກດ້ວຍສຳ ນວນກ້ອຍຄວາມສັນຫນົກແຫນ້ນເຄັ່ງຄັດ ແຕ່ທ່ວາຫມົດກໍຫາກບ່ ບອກໄວ້ຢ່າງເຂັ້ມງວດຢູ່ໃນກົດລະບຽບຂອງພວກເຮົາ ຈັ່ງຊັ້ນຈົ່ງ ເວົ້າໄດ້ວ່າ ເກືອບບໍ່ມີໂອກາດສຳລັບການປະພຶດຜິນລະບຽບວິໄນ ແນວໃດແນວຫນຶ່ງຫລືແມ່ນແຕ່ຫົນທາງຊົ່ວໃຊ້ອະພິສິດຢ່າງໃດ ຢ່າງ ຫນຶ່ງ. ໃນເວລາດຽວກັນສະມາຊິກທັ້ງຫມົດຂອງນິຄົມກໍປະເຊີນ ຫນ້າກັບວຽກງານຢ່າງຫນຶ່ງຊຶ່ງມີຄຸນຄ່າຊະນິດ ບໍ່ອາດມີໃຜສົງໄສໄດ້ ນັ້ນກໍຄືການສ້ອມແປງນິຄົມໃຫມ່ໃຫ້ສຳເລັດຮຽບຮ້ອຍ ເພື່ອໃຫ້ ພວກເຮົາໄດ້ໄປຢູ່ໂຮມກັນໃນບ່ອນດຽວ ແລະຈັດການບຸກເບີກເຂດ ດິນທັ້ງຫມົດ. ຈັ່ງແມ່ນວຽກງານອັນນີ້ເປັນພັນທະຢ່າງຫນຶ່ງ ຂອງ ພວກເຮົາ ແລະພວກເຮົາກໍຈະຕ້ອງເຮັດໃຫ້ສຳເລັດຢ່າງແນ່ນອນ. ຍ້ອນແນວນີ້ແລ້ວ ພວກເຮົາທຸກຄົນຈົ່ງປັບແປງຕີ້ອເອງ ຮັບເອົາ

ຄວາມຫຍຸ້ງຍາກສັບສົນຕ່າງໆໄດ້ຢ່າງງ່າຍດາຍ ແລະພ້ອມກັນຫລີກ
ເວັ້ນການພັກຜ່ອນຢ່ອນອາລົມຫລາຍກ່ວາເກົ່າ, ບໍ່ໃຊ້ເສື້ອຜ້າໃຫມ່,
ບໍ່ກິນອາຫານຢ່າງເຫລືອເຟືອ ທັງບໍ່ເພື່ອອົດອອມກະຫນອມ
ເງິນທຸກອັດໄວ້ໃຊ້ຈ່າຍສໍາລັບຄອກຫມູ ແນວປູກແລະລ້ຽງງົວເຂົ້າ
ຄັ້ນໃຫມ່. ພວກເຮົາສູ້ທົນເສຍສະຫລະສິ່ງເລັກສິ່ງນ້ອຍເຫລົ່ານີ້
ໃສ່ພາລະກິດແຫ່ງການກໍ່ສ້າງເທົ່ອໃຫມ່ ດ້ວຍອາລົມດີມີຄວາມສະ
ຫງົບທຸ່ນທ່ຽງ ແລະຄວາມຫມັ້ນໃຈ ເບີກບານ ຈົນຂ້າພະເຈົ້າກ້າ
ຕອບອອກໄປຢ່າງອວດອົ່ງ ເມື່ອມີນັກຮຽນຮຸ່ນນ້ອຍຜູ້ຫນຶ່ງຖາມຂຶ້ນ
ໃນກອງປະຊຸມໃຫຍ່ວ່າ: ບໍ່ທັນຮອດຍາມຕັດສິ້ງໃຫມ່ເທົ່ອຫວະ?
ຂ້າພະເຈົ້າຕອບວ່າ:

- ເມື່ອໃດພວກເຮົາສ້ອມແປງນິຄົມໃຫມ່ແລ້ວຮຽບຮ້ອຍ
ແລະພວກເຮົາຮັ່ງມີຂຶ້ນ ເວລານັ້ນທຸກໆຄົນ ຈະມີເຄື່ອງນຸ່ງໃຫມ່
ອ່ຽມ ແຕ່ຫ້ວຮອດຕົນ: ພວກຜູ້ຊາຍຈະມີເສື້ອຜ້າກໍາມະຍີ ແລະ
ສາຍແອວເງິນ, ພວກແມ່ຍິງຈະໃສ່ກະໂປງຜ້າໃຫມ ເກີບສຸບຂັດ
ມັນ, ແຕ່ລະກອງຈະມີລົດໂອໂຕປະຈໍາຄັນຫນຶ່ງ ແລະນອກນີ້ ແຕ່
ລະຄົນຍັງຈະມີລົດຖີບເປັນຂອງຕົນເອງ, ຢູ່ໃນເຂດແດນຂອງນິຄົມ
ທຸກບ່ອນຈະປູກພຸ່ມດອກກຸຫລາບ ພວກເຈົ້າເຫັນບໍ? ແຕ່ເວລານີ້
ອາໃສເງິນ ສ00 ຣຸບ ນີ້ພວກເຮົາຊື້ຈົນພົ້ນຊຶມມ້ຽດານຈັກໂຕ
ກ່ອນ.

ພວກເດັກນ້ອຍພາກັນຫ້ວສະອຶກສະອ້ອຍ, ແລ້ວຮອຍຕາບຈູນ
ດ້ວຍຜ້າເສດຕ່ອນນ້ອຍຕາມກົ້ນສ້ຽ ແລະຫມອກເງົ້ບສີຫມົ່ນເປື້ອນ
ນ້ໍາມັນ ກໍ່ບໍ່ເປັນຫນ້າອະເຫຍົ້ອງສໍາລັບພວກເຂົາພໍ່ເທົ່າໃດ.

ໃນເປິງນັ້ນ ພວກເດັກນ້ອຍຮຸ່ນອາວຸໂສ ຂອງນິຄົມຍັງຄົງຖືກ ຕຳຫນິຕິຕຽນຍ້ອນມີຄຸນສົມບັດຫ່າງໄກ ກັບລັກສະນະໃນອຸດົມການ ແລະຄຸນນະທຳຢູ່, ແຕ່ຢູ່ໃນໂລກນີ້ຍັງຈະມີໃຜແດ່ສາມາດຫລີກເວັ້ນ ຈາກຂໍ້ຕຳຫນິແບບນີ້? ສຳລັບວຽກງານອັນຫຍຸ້ງຍາກແລ້ວ ກຸ່ມຊີ ນຳຂອງພວກເຮົາໄດ້ສະແດງອອກຊຶ່ງຄຸນສົມບັດອັນລ້ຳເລີດຂອງລະ ບົບດຳເນີນງານ ຊະນິດຄັກແທ້ແນ່ນອນລະບົບຫນຶ່ງແລ້ວ. ຕາມ ທັດສະນະຂອງຂ້າພະເຈົ້າແລ້ວ ຄຸນງາມຄວາມດີຕົ້ນຕໍຂອງພວກເຂົາ ແມ່ນການຄ່ອຍໆພະຍາຍາມຫລີກອອກຈາກການເປັນຜູ້ນຳຫນ້າ ເພື່ອດຶງດູດເອົາມະຫາຊົນຂອງນິຄົມທັງຫມົດເຂົ້າມາຢູ່ນຳ.

ໃນກຸ່ມນີ້ມີນັກຮຽນຮຸ່ນທຳອິດຂອງພວກເຮົາ ຮ່ວມຢູ່ນຳເກືອບ ຫມົດທຸກຄົນເຊັ່ນ ກາຣາບານີບ, ຊາໂດຣອບ, ແວກຊະເນັບ, ບຣາເຊັນໂກ, ໂວໂລຄອບ, ເວດກອບສກີ, ຕາຣາເນດ, ປູຣູນ, ກູດ, ອິດຊາຈິ, ນາສເຕຍ ໂນເຊັບນາຢາ. ນອກນີ້ກໍຍັງມີພວກ ຮຸ່ນນ້ອງຕື່ມອີກເຊັ່ນໂອປຣິຊໂກ, ເກອໍເກັບສະກີ, ໂວນກອບ ໂຈຣາ ແລະໂວນກອບ ອາໂລດຊາ, ສະຕູບິດຊິນ ແລະ ກຸດລາຕີ.

ໂອປຣິຊໂກ ນັ້ນ ເຊື່ອມຊຶມຮັບເອົາຄຸນສົມບັດດີງຫລາຍອັນ ຈາກບຣາເຊັນໂກ ເຊັ່ນຄວາມຫລົງໃຫລລືມຕົວຕໍ່ວຽກງານ, ຄວາມ ຮັກມ້າ ແລະສະມັດກະພາບເຫນືອມະນຸດຕໍ່ການອອກແຮງງານ. ຫນໍບໍ່ມີແວວປະເສີດໃນດ້ານປະດິດສ້າງຄືກັບບຣາເຊັນໂກ, ບໍ່ດັ່ນ ດ້ງເທົ່າ ແຕ່ລ້ຳພັດມີຄຸນສົມບັດສະເພາະຂອງຕົວເອງເຊັ່ນຄວາມສົດ ຊື່ນວ່ອງໄວອັນບໍ່ເຫືອດແຫ້ງເປັນ ແລະວາດທ່າເຄື່ອນເຫນ້ງອັນ ແນ່ນອນແລະຫນັກແຫນ້ນ.

ໃນສາຍຕາຂອງສະມາຊິກທຸກຄົນ ເກອໍເກັບສະກີ ເປັນຄົນມີ ລັບລົມຄົມໃນແບບຫນຶ່ງ. ເບິ່ງຮູບນອກຫມໍ້ຄ້າຍຄືຄົນຊຶກາມ: ໃບ ຫນ້າຄ້ຳກ່ຳ, ແກ່ນຕາດຳປີ້, ອາລົມຕະຫລົກແບບແຫ້ງໆແລະ ລັບໆ, ແສງຕາແຝງແຈວເຍາະເຍີ້ຍແບບນັກຫລອຍຕໍ່ລັບສົມບັດ ສ່ວນຕົວ ສິ່ງເຫລົ່ານີ້ຄົງມາຈາກເລືອດຊຶກາມ ສ່ວນຫນຶ່ງເປັນແມ່ ແຕ່ເບິ່ງອີກດ້ານຫນຶ່ງ ເຂົາເປັນຄົນລຸກເຕົ້າຕະກູນທີ່ມີການສຶກສາອັດ ທະນະທຳດີຜູ້ຫນຶ່ງ: ເຂົາເປັນນັກອ່ານ, ມັກຄວາມສະອາດ ແຕ່ງ ຕົວເຈົ້າຊູ້ແບບຄົນໃນເມືອງ ແລະເວົ້າດ້ວຍສຳນຽງຄົນຊັ້ນສູງໂດຍມີ ການຫັນລົ້ນຕົ້ມຫນ້ອຍຫນຶ່ງ. ພວກເດັກນ້ອຍຢັ້ງຢືນວ່າຫມໍເປັນລູກ ຊາຍຂອງເຈົ້າແຂວງເກົ່າແຄ້ວນອງກຸດ. ສ່ວນຜູ້ກ່ຽວເອງປະຕິ ເສດແຂງຂັນກ່ຽວກັບຕົ້ນກຳເນີດຫນ້າອັບອາຍແບບນີ້ດ້ວຍທຸກ ວິ ທີທາງ ແລະໃນເອກະສານຕິດຕາມຂອງຫມໍກໍບໍ່ມີຮ່ອງຮອຍແຫ່ງອະ ດີດອັນນີ້ຢູ່ເລີຍ. ແຕ່ໃນກໍລະນີຢ່າງນີ້ ຂ້າພະເຈົ້າເອງມັກມີທ່າອ່ຽງ ຢາກເຊື່ອພວກເດັກອື່ນໆຫລາຍກ່ວາ. ເກອໍເກັບສະກີ ເປັນຫົວ ຫນ້າກອງຫນຶ່ງຢູ່ນິຄົມໃຫມ່ ແລະໃນບໍ່ດົນຫມໍກໍສຳແດງຕົວອອກ ແຕກຕ່າງຈາກຫມູ່ຢ່າງເຫັນໄດ້ຄັກ. ບໍ່ມີນາຍກອງຄົນໃດ ເອົາໃຈ ໃສ່ເບິ່ງແຍງລູກກອງຂອງຕົນເທົ່າກັບນາຍກອງເບີ ຝ ເຊິ່ງແມ່ນກອງ ຮຸ່ນນ້ອຍກ່ວາຫມູ່. ຫມໍອ່ານປຶ້ມສູ່ພວກເຂົາຟັງ, ແນະນຳຊ່ວຍເຫລືອ ໃນເວລາມຸ່ງກີ, ບັງຄັບໃຫ້ພວກເຂົາອາບນ້ຳສະສ່ວຍຕົນຕົວ ແລະ ຍາມໃດກໍບໍ່ຢຸດຢ່ອນໃນການສ້າງຄວາມເຊື່ອຫມັ້ນຕໍ່ພວກເຂົາ ດ້ວຍ ການໃຫ້ເຫດໃຫ້ຜົນແລະຈີ້ຈົ່ນ. ຢູ່ໃນສະພານາຍກອງ ຫມໍເປັນ ຕົວແທນແບບປະຈຳການສຳລັບການໃຫ້ຄວາມຮັກ ຄວາມເອົາໃຈ

ໃສ່ ຕໍ່ພວກເດັກນ້ອຍທີ່ຍັງອ່ອນນ້ອຍ ແລ້ວຫມໍກໍໄດ້ຮັບຜົນສໍາ
ເລັດຢ່າງຫລວງຫລາຍສົມຄວາມຕັ້ງໃຈ. ພວກເດັກນ້ອຍຜູ້ຂຶ້ດງດ
ທີ່ສຸດຜູ້ຈ່ອຍໂຊອ່ອນເພຍທີ່ສຸດ ກໍ່ກຸກໄປຢູ່ໃນຄວາມຮັບຜິດຊອບ
ຂອງຫມໍແລ້ວ ອາທິດດຽວເທົ່ານັ້ນພວກເດັກນ້ອຍເຫລົ່ານີ້ກໍ່ມີຮູບ
ໂສມສະອາດອ່ອງຕ່ອງຫວີຜົມຢ່າງເຈົ້າຊູ້ ແລະຢ່າງຟຸ່ງຫນ້າສູ່ວຽກ
ງານຢ່າງກໍ່ກຕ້ອງຕາມໂມງເວລາ.

ມີຄົນໃຊ້ນາມສະກຸນ ໂວນກອບ ຢູ່ສອງຄົນໃນນິຄົມ ຄືໂຈຮາ
ແລະ ອາໂລຊາ. ເຖິງວ່າພວກເຂົາເປັນອ້າຍເປັນນ້ອງກັນ ແຕ່ທັງ
ສອງກໍ່ບໍ່ມີນິໄສຄືກັນຈັກຢ່າງ. ນາຮອດນິຄົມໃນຕອນທໍາອິດ ໂຈຮາ
ເລີ່ມຕົ້ນບໍ່ຄ່ອກເລີຍ ເຂົາສະແດງຕົວເປັນຄົນຂີ້ຄ້ານຊະນິດຫາໃຜປຽບ
ບໍ່ໄດ້, ນິໄສອ່ອນແອ ແລະເຂົ້າຫມູ່ຍາກ, ນັກເກາະຜິດ ແລະອາ
ຄາດເປັນທີ່ຫນ້າ. ນັບບໍ່ຖ້ວນ ບໍ່ຫົວ ແລະບໍ່ນ້ອກປາກພໍປານໃດ, ຂ້າ
ພະເຈົ້າເຄີຍຄິດວ່າ ນັນຄົຈະຢູ່ກັບພວກເຮົາບໍ່ໄດ້ ແລ້ວຈະລັກຫນີ
ໄປ. ການປ່ຽນແປງໃນຕົວຂອງນັນເກີດຂຶ້ນເອງຢ່າງບໍ່ມີພິທີການ
ໃດໆ ແລະໂດຍບໍ່ໄດ້ເປືອງຫລັກວິຊາຄູຂໍ້ໃດຊໍ້າ. ນາຮອດມ້ານ
ຍາມດີ ນັ້ຫນໍ່ ຊໍ່ຕ້ອງໄດ້ຂຸດດິນກຽມເຮັດຫ້ອງໃຕ້ດິນຫ້ອງຫນໍ່ງ,
ສະພານາຍກອງ ມີທາງເລືອກຢູ່ທາງດຽວຄືສັບຊ້ອນ ກາລາແຕ້ງໂກ
ກັບໂຈຮາໄວ້ນໍາກັນ. ຫນິດທຸກຄົນຫົວໂຄບຂຶ້ນ.

ບໍ່ມີໃຜຄາດຄຶດມາກ່ອນວ່າ ຢາກເອົາຍອດຂີ້ຄ້ານທັ້ງສອງມາ
ເຮັດວຽກຮ່ວມກັນໄດ້.

ທຸກໆຄົນຫົວຂຶ້ນຕື່ນອີກ ເມື່ອມີຜູ້ສະເຫນີວ່າການທົດລອງຄັ້ງ
ນີ້ຫນ້າສົນໃຈສົມຄວນ: ຕັ້ງກອງພິເສດຂຶ້ນກອງຫນໍ່ງ ເພື່ອພິສູດ

ພິນງານຂອງມັນ. ພວກເຂົາຈະຂຸດດິນໄດ້ຫລາຍເທົ່າໃດ. ໂຈຣາ ໄດ້ຮັບເລືອກເປັນນາຍກອງ ເພາະ ກາລາແຕ້ງໂກ ນັ້ນຍິ່ງຂີ້ຮ້າຍ ກ່ວາຫມໍອີກ. ເມື່ອ ໂຈຣາ ມາສະເຫນີຕົວຕໍ່ສະພາ ຂ້າພະເຈົ້າເວົ້າ ກັບຫມໍວ່າ:

-ເອົາລະ ໂອນກັບ, ເລື່ອງມັນເປັນແນວນີ້ລະ, ເຂົາເລືອກ ໂຕເປັນນາຍກອງພິເສດ, ວຽກຂຸດດິນເຮັດຫ້ອງບ່ອນໃຫມ່ຫ້ອງ ຫນຶ່ງ ແລ້ວໃຫ້ກາລາແຕ້ງໂກເປັນສະມາຊິກໃນກອງ ແຕ່ພວກເຮົາ ຄຶດຢ້ານວ່າ ໂຕຊິບໍ່ສາມາດນຳພາມັນໄດ້.

ໂຈຣາ ຄຶດຊຶງຢູ່ຄາວຫນຶ່ງ ແລ້ວເວົ້າກັດແຂ້ວວ່າ:

-ຂ້ອຍຊິເຮັດໃຫ້ໄດ້.

ມື້ຕໍ່ມາ, ນາຍເວນປະຈຳວັນ ແລ່ນມາຫາຂ້າພະເຈົ້າດ້ວຍທ່າ ທີ່ຕື່ນເຕັ້ນ:

-ມານຳຂ້ອຍແມ້... ເປັນຕາເບິ່ງພິລຶກໄດ໋, ຫມໍໂຈຣາກຳລັງ ຈັດການສັ່ງສອນ ກາລາແຕ້ງໂກ. ແຕ່ວ່າຕ້ອງບໍ່ໃຫ້ມັນຮູ້ເມື່ອຄົງ ໃດ໋ລະ, ບໍ່ຊັ້ນແລ້ວທໍ່ນັ້ນລະ!

ພວກເຮົາຈອບຫມັ້ນ ເລາະລຽບເຂົ້າຕາມພຸ່ມໄມ້ຈົນຮອດບ່ອນ ເກີດເຫດ. ຢູ່ລົ້ນສອນເບື້ອງຫນຶ່ງຫັກຈາກບ່ອນເປັນສອນເກົ່າ, ເທົ່າພົ້ນດິນມີຮອຍຂີດເປັນຮູບສີ່ຫລ່ຽມຍາວ ເພື່ອເຮັດຫ້ອງໃຕ້ ດິນແຫ່ງໃຫມ່. ລົ້ນເບື້ອງຫນຶ່ງແມ່ນພາລະຂອງໂຈຣາ ສ່ວນອີກ ເບື້ອງຫນຶ່ງແມ່ນພາລະຂອງ ກາລາແຕ້ງໂກ. ການສະສົມກຳລັງ ແລະຄວາມແຕກຕ່າງກັນໃນດ້ານປະສິດທິພາບແຮງງານລະຫວ່າງຄົນ ທັງສອງເປັນທີ່ປະຈັກຕາແລ້ວ: ໂຈຣາ ຂຸດດິນໄດ້ຫລາຍແນ່ ໆ

ກ້ອນແລ້ວ ສ່ວນກາລາແຕ້ງໂກຫາກໍໄດ້ແຫບແຄບໆເທົ່ານັ້ນ. ແຕ່ວ່າຝ່າຍນີ້ບໍ່ໄດ້ນັ່ງຢູ່ລ້າດ່ອກ: ຂາໃຫຍ່ເປເປັນມະໂລ່ງໂຄ່ງເຄ່ງ ຂອງຫມໍພາຮ່າງຄົງກົ້ມອ່ຽງໃສ່ຊ້ວານຢ່າງຝືນໃຈ. ຫມໍຊຸດດິນ ທ້ຽງທ່ຽວ ງວາກຫົວໃຫຍ່ຫຶກເບິ່ງໂຈຮາເລື້ອຍໆ ກ້າຝ່າຍນີ້ບໍ່ເບິ່ງ ຫມໍເຊົ່າເຮັດວຽກແຕ່ຍັງຄົງເອົາຕີນຢຽບຊ້ວານໄວ້ຢູ່ໃນທ່າກຽມ ພ້ອມທີ່ຈະສຽບຫມາກຊ້ວານເຂົ້າໃນດິນທັນທີທີ່ເຫັນສັນຍານໄພ, ເຫັນໄດ້ຢ່າງຈະແຈ້ງວ່າ ໂວນກອບ ນັ້ນ ເບື່ອຫນ່າຍຕໍ່ເລ່ຫລ່ຽມເຫລົ່ານີ້ແລ້ວ, ຫມໍເວົ້າກັບກາລາແຕ້ງໂກວ່າ:

-ແມ່ນໂຕຄຶດວ່າ ເຮົາຊິຢູ່ຫນີ້ເພື່ອອ້ອນວອນໂຕ, ນິບໄຫວ້ໂຕຊັ້ນຫວາ? ເຮົາບໍ່ເສຍເວລາກັບໂຕດອກເດີ້.

-ແລ້ວເປັນຫຍັງໂຕຈົ່ງຕ້ອງເຮັດວຽກຫນັກແທ້ລະ? ກາລາແຕ້ງໂກຖາມບໍ່ເຕັມສຽງ.

ໂຈຮາບໍ່ຕອບ ແຕ່ຫຍັບເຂົ້າໄປໃກ້ຫມໍ:

-ເຮົາຊິບໍ່ເວົ້າຫຍັງກັບໂຕອີກແລ້ວ ເຂົ້າໃຈບໍ່? ແຕ່ຖ້າວ່າໂຕບໍ່ຂຸດດິນ ແຕ່ຫນີ້ຈົນຮອດຟຸ້ນ ເຮົາຊິໂຍນຫໍ່ເຂົ້າເພນໂຕລົງກະຕ່າຂີ້ເຫຍື້ອໃຫ້ຫມາກິນເລີຍ.

-ແລ້ວໂຕຄຶດວ່າ ໂຕຊິເຮັດໄດ້ຊັ້ນຫວະ? ອານໂຕນ ຊິບໍ່ເຫດໂຕຢ່າງໃຫຍ່ຫວະ?

-ລາວຊິເຫດຊິດ່າ ກໍແມ່ນເລື່ອງຂອງລາວ, ແຕ່ເຊື່ອເທາະວ່າ ເຮົາຊິຈັດການແນວນັ້ນ ກັບໂຕແທ້ໆ.

ກາລາແຕ້ງໂກ ຈົ້ງເບິ່ງຕາຂອງໂຈຮາ ແລ້ວຫມໍກໍເຂົ້າໃຈວ່າ ຝ່າຍນີ້ຈະເຮັດແທ້ທຳຈິງຄືເວົ້າ, ຫມໍເລີຍຈົ່ມພຸມໆວ່າ:

-ແຕ່ເຮົາກະເຮັດຢູ່ຫນີ້ເດ້, ໂຕຢ່າກວນເຮົາໄດ້ບໍ?

ຊ້ານຂອງຫມໍເລີ່ມເຫນ້າຕົງໄອ໊ບກ່ວາເກົ່າ. ນາຍເວນປະຈໍາວັນກອດແຂນສອກຂ້າພະເຈົ້າແຫນ້ນ, ຂ້າພະເຈົ້າຈຶ່ມບອກເຂົາວ່າ:

-ບັນທຶກໃສ່ລາຍງານເລີຍ.

ໃນຕອນຄ່ໍາວັນນັ້ນ ນາຍເວນປະຈໍາວັນ ກໍສະຫລຸບບົດລາຍງານຂອງເຂົາດ້ວຍຄໍາເວົ້າເຫລ່ານີ້:

ຄວນສັງເກດວ່າວຽກງານຂອງກອງພິເສດເລກ ສ "ຫ້ອງໃຕ້ດິນ" ໂດຍມີ ໂວນກອບ ອ້າຍເປັນນາຍກອງນັ້ນ ໄດ້ສໍາເລັດລົງຢ່າງດີແລ້ວ.

ການຣາບານີບ ຈອງຫນີກອດເອົາຫົວຂອງໂວນກອບມາໄວ້ໃນວົງແຂນຂວາອັນແຂງແຮງຂອງຫມໍແລະບີບສຽງວ່າ:

-ໂຍ້ວ... ນີ້ບໍ່ແມ່ນວ່າກອງໃດ ກໍຊິໄດ້ຮັບຄໍາຍົກຍ້ອງຊົມເຊີຍແບບນີ້ເດ້.

ໂຈຣາຍ້ົມຢ່າງພາກພູມໃຈ, ຢູ່ປະຕູຫ້ອງການພຸ້ນ ການາເຕ້ງໂກ ກໍສົ່ງຣອຍຍ້ົມອາຍໆມາໃຫ້ພວກເຮົາ ແລ້ວເວົ້າສຽງອຸ່ນອ້ໍວ່າ:

-ອ່າ. ແທ້ໃດ! ນີ້ພວກເຮົາເຮັດວຽກຂະຫນາດເລີຍ ເຮັດເອົາແທ້ເອົາວ່າປານຜີບ້າເອົາຊຶ່ງ.

ນັບແຕ່ບັດນັ້ນມາ ໂຈຣາ ກໍເລີຍປ່ຽນນິໄສໃຈຄໍເປັນຄົນລະຄົນເອົາຊຶ່ງ ຫມໍລອຍມຸ່ງສູ່ເສັ້ນທາງພັດທະນາຕົນຢ່າງໄວວາ, ສອງເດືອນຕໍ່ມາສະພານາຍກອງຈັດສົ່ງຫມໍໄປຢູ່ນິຄົມໃຫມ່. ເພື່ອປະຕິບັດພາລະກິດພິເສດຕັດສ້ົງພວກຂ້ົ້ານຂອງກອງທີ ກ.

ສ່ວນ ອ້າໂລດຊາ ໂວນກອບນັ້ນ ກໍ່ກອີກກໍ່ກໃຈຄົນສ່ວນ
ຫລາຍ ນັບແຕ່ມື້ທຳອິດໂລດ. ຫມໍເປັນຄົນຂີ້ເຮີ, ໃບຫນ້າເຕັມ
ໄປດ້ວຍຮອຍກະດ່າງກະດ່າງຫລາຍແບບ ແລະຫນ້າຜາກແຄບຕ່ຳ
ຈົນເບິ່ງຄືວ່າຜົມຂອງຫມໍນັ້ນເກີດປົ່ງອອກມາທາງຫນ້າ ຫລາຍກ່ວາ
ເທົ່າຫົວ. ແຕ່ອ້າໂລດຊາ ເປັນເດັກສະຫລຽວສະຫລາດຫລາຍ,
ສະຫລຽວສະຫລາດຈົນເປັນທີ່ປະຈັກແກ່ສາຍຕາຂອງຫມູ່ຄູ່ໃນ ທັນ
ທີທັນໃດ. ບໍ່ມີໃຜເປັນນາຍກອງໄດ້ດີ່ເທົ່ນຫມໍ: ຮູ້ຈັກຄິດໄລ່ວຽກ
ງານ, ຈັດຢາຍກຳລັງແຮງ, ຊອກພົບພາຫະນະ ແລະວິທີການເຮັດ
ວຽກແບບໃຫມ່ເລື້ອຍໆ.

ກູດລາຕີຜູ້ມີໃບຫນ້າເປ ແບບຊາວມົ້ງໂກນ, ຮ່າງຫົກແລະກົດ
ນັ້ນ ກໍເປັນເດັກຊາຍທີ່ສະຫລຽວສະຫລາດດີຄົນຫນຶ່ງເຊັ່ນກັນ.
ເກົ້າແມ່ນວ່າຜ່ານມາ ຫມໍບໍ່ເຄີຍມີອາຊີບຢ່າງອື່ນ, ກ່ອນຈະມາຢູ່ນຳ
ພວກເຮົາ ນອກຈາກເປັນລູກຈ້າງລາຍວັນກໍຕາມ ຫມໍມີສົມນະຍາ
ນາມວ່າ "ກວກກູນ" (ຊາວນາຮ້ຳ - ພາສາອູກຣາອິນ) ມາສະ
ເຫມີ, ແມ່ນວ່າ ຖ້າບໍ່ມີຄົນຊ່ຳໄຊຫົນທາງເຂົ້າສູ່ກັນແກ່ວພັກໃຫ້
ແກ່ຫມໍໃນເວລາຕໍ່ມານັ້ນ, ກູດລາຕີມີຫວັງໄດ້ເປັນກູລັກແທ້ໆ ເພາະ
ວ່າສິ່ງທີ່ຝັງເລິກຢູ່ໃນຈິດໃຈກະດູກດຳຂອງເຂົານັ້ນ ນັບແມ່ນສັນຊາ
ຕະຍານຢ່າງຫນຶ່ງ, ແມ່ນຄວາມຮັກຕໍ່ລັບສົມບັດ ຕໍ່ກອງນ ຄາດ ໄກ
ມ້າ, ຝຸ່ນ ແລະທົ່ງນາໄກແລ້ວ, ນັບແຕ່ວຽກຢູ່ກຸ່ງນາຂຶ້ນໄປ ຈົນ
ຮອດເລົ້າເຂົ້າ ແລະກອງເຟືອງ. ກູດລາຕີເປັນຄົນທີ່ມີຄວາມຕັດ
ສິນເດັດດ່ຽວຄັກແນ່ຊະນິດຫາໃຜທຽມບໍ່ໄດ້, ເວົ້າຈາຄ່ອຍໆບໍ່ຟ້າວ
ຟ້ຳ ຢ່າງມີເຫດຜົນຫນັກແຫ້ນຕາມແບບຄົນຜູ້ມັດທະຍັດຈົ່ງຈັ່ງ

ແລະຊ່ວງດູແລຊັບສົມບັດ. ແຕ່ໃນການະວ່າເຄີຍເປັນລູກຈ້ວງມາ
ແລ້ວ ເຂົາຈຶ່ງກຽດຊັງພວກກຸລັກຢ່ວງງບງໍ່ເລິກເຊິ່ງຮຸນແຮງ ແລະ
ເດັດຂາດເທົ່ວງກັບທີ່ເຂົາສຸມຈິດໃຈເທີດທູນເຊື່ອຫມັ້ນ ໃນຄຸນຄ່ວ
ຂອງກອມມູນພວກເຮົາ ແລະກອມມູນທົ່ວງໄປ. ນັບເປັນເວລວ
ດົນນານມາແລ້ວທີ່ກຸດລາຕີໄດ້ເປັນແຂນຂວາຂອງ ກາລິນາ ອິວານໂນ
ວິດ ແລະມາຮອດປີ ໑໙໘໓ ວຽກງານເສດຖະກິດສ່ວນໃຫຍ່ຂອງ
ພວກເຮົາກໍແມ່ນອີງໃສ່ເຂົານັ້ນເອງ.

ສະຕູບິດຊິນ ກໍແມ່ນນັກປົກຄອງທີ່ດົນຄົນຫນຶ່ງ, ແຕ່ໃນອີກ
ວານຫນຶ່ງ. ເຂົາເປັນຊາວກໍາມາຊິບຄົນຫນຶ່ງຢ່ວງແທ້ຈິງ, ສືບເຊື້ອ
ສາຍມາຈາກຄອບຄົວຊ່ວງຫັດຖະກໍາຢູ່ຄາກັບ, ສາມາດເວົ່ວໃຫ້ທຸກ
ຄົນຟັງວ່ວ ບັນພະບຸລຸດອີ່ປຸ່ອີ່ປຸ້ຂອງເຂົາເຄີຍຜ່ານວຽກງານຢູ່ໃສມາ
ແລ້ວ. ສະມາຊິກຂອງຄອບຄົວເຂົາມີຊື່ສຽງຢູ່ກັບແຕ່ວຊາວກໍາມາ
ຊິບຢູ່ໃນເມືອງນີ້ມາຕັ້ງດົນແລ້ວ, ອ້ວຍກິກຂອງເຂົາກຶກເນລະເທດ
ຍ້ອນໄດ້ເຂົ້າຮ່ວມໃນການປະຕິວັດປີ ໑໙໐໕. ສະຕູບິດຊິນເປັນຄົນ
ໄດ້ຫລວບໄດ້ລວຍສົມຕົວແທ້ໆ, ວົງຄ້ວບວງ ແກ່ນຕາດໍາແລະດົນ,
ຢູ່ແຈປວກທ້ວງສອງເບ້ວ ກ້ວມຊຶ້ນຮູບວິຍຶດຕົວໄດ້ວ່ວງໄວ ແລະໃບ
ຫນ້ວຂອງເຂົານັ້ນຍວມໃດກໍຄືວ່ວ ກຽມພ້ວມທີ່ຈະສະແດງອວກວນ
ຍິກຄ້ວວ່ວ ວ່ວຕາປ່ຽນທ່ວທີໄດ້ຢ່ວງວ່ວຽໄວທ້ວງເປັນຕາຫ້ວນໍ້ວຍ. ສະຕູ
ບິດຊິນ ຮັບຜິດຊອບຂະແຫນງການສໍາຄັນທີ່ສຸດຢ່ວງຫນຶ່ງຢູ່ໃນວຽກ
ງານບຸກເບີກຂອງພວກເຮົາຄືຄອກຫມູຢູ່ນິຄົມໃຫມ່ ເຊິ່ງນັບມື້ນັບນິ
ປະລິມານຫລວຍຂຶ້ນໄວວ່ວຫນ້ວຢ້ວນ. ເຂົາຊຶ້ນໍ້ວກອງພິເສດທີ ໑໐
ເພື່ວເຮັດວຽກງານອັນນີ້ ເຂົາສວມດ້ວງກອງນີ້ໃຫ້ເປັນກອງເຂັ້ມ

ແຂງຫ້າວຫັນເກືອບບໍ່ຄືນັກລ້ຽງຫມູພື້ນບ້ານເລີຍ. ພວກເດັກນ້ອຍ ມີປົ້ມບັນທຶກຫົວຫນ້າຢູ່ປະຈຳຕົວສະເຫມີ. ສະຫມອງຂອງພວກ ເຂົາຄຶດໄລ່ອັດຕາອາຫານໃຫ້ສັດ, ມື້ເຈ້ຍສຳບັນທຶກ, ຢູ່ຄອກຫມູ ແຕ່ລະຄອກ ມີປ້າຍນ້ອຍໆຫ້ອຍຢູ່ປະຕູ ຕາຕະລາງເສັ້ນຕ່ຳລາ ແລະ ຂໍ້ມູນຕ່າງໆຕິດຫ້ອຍຢູ່ທຸກຈອກແຈຂອງອາຄານ, ສັດທຸກຕົວມີບັດ ປະຈຳຕົວ ບ່ອນມາຢ່າງຈະແຈ້ງ. ມີຫຍັງອີກແດ່ທີ່ຍັງບໍ່ມີຢູ່ໃນຄອກ ຫມູເຫລົ່ານີ້?

ກຸ່ມສຳຮອງຂະຫນາດໃຫຍ່ ມີຢູ່ສອງກຸ່ມໃກ້ຊິດກັບແກນນຳໂດຍ ກົງຫລາຍເຕີບ. ກຸ່ມຫນຶ່ງແມ່ນນັກຮຽນຮຸ່ນອ້າຍ ເຊິ່ງລ້ວນແຕ່ມີ ເຫື່ອແຮງ ພະລັງຫລາຍເປັນຜູ້ອອກແຮງງານ ແລະເປັນຫມູ່ເພື່ອນ ທີ່ດີຕໍ່ກັນ ແຕ່ພວກເຂົາບໍ່ມີແຈວປະເສີດໃນດ້ານຈັດຕັ້ງເຊັ່ນຜູ້ທີ່ ເຂັ້ມແຂງແລະໃຈເຢັນຄື ປຣີໂກດໂກ, ໂຊບິດ, ໂຊໂຣກາ, ແລ ເຊີ, ເກແຊ, ຊະແນແດກ, ອອບຊາເຣັນໂກ, ໂກຣີໂຕ ເຟເດ ເຣັນໂກ ແລະຢູ່ໃນກຸ່ມທີສອງແມ່ນພວກເດັກນ້ອຍ ເຊິ່ງເຕີບໃຫຍ່ ຂະຫຍາຍຕົວແຮງ ທັງສະແດງຕົວວ່າມີວາດແວວແຫ່ງຄວາມເປັນ ນັກຈັດຕັ້ງປົ່ງຊອນອອກມາແລ້ວ ຍ້ອນວ່າອາຍຸຍັງອ່ອນນ້ອຍຢູ່ ພວກເຂົາຈຶ່ງບໍ່ສາມາດກຳສາຍບັງຫງຽບບັນຊາວຽກງານໄດ້ ແລະອີກ ດ້ານຫນຶ່ງ ພວກຮຸ່ນອ້າຍກໍກຳຕຳແຫນ່ງຊີ້ນຳຢູ່ແລ້ວ. ພວກເຂົາ ຮັກແພງ ແລະນັບຖືພວກອ້າຍຮຸ່ນໃຫຍ່ດີ ແຕ່ພວກນີ້ກໍມີທ່າດີກ່ວາ ຄືໄດ້ຊຶມລິດຊາດຂອງນິຄົມຕັ້ງແຕ່ຍັງຫນຸ່ມ ແລະກໍຮັບຊາບຊຶມເອົາ ປະເພນີຕ່າງໆຂອງນິຄົມໄວ້ຢ່າງເລິກເຊິ່ງກ່ວາ, ຄວາມສັດທາຂອງ ພວກເຂົາໃນຄຸນຄ່າອັນຫາແນວປຽບບໍ່ໄດ້ຂອງຊີວິດ ກອມມູນ ຮຸ່ນ

ແຮງກ່ວາ ແລະໂດຍສະເພາະແລ້ວ ກໍແມ່ນວ່າພວກເຂົາໄດ້ຮ່ຳຮຽນ
ຫລາຍກ່ວາ, ເຊື່ອແຫນງຄວາມຮອບຮູ້ໃນຕ້ວຂອງພວກເຂົາມີຊີວິດ
ຊີວາກ່ວາ. ສ່ວນຫລວງຫລາຍ ສະມາຊິກກຸ່ມນີ້ ແມ່ນພວກທີ່ເຮົາ
ເຄີຍຮູ້ຈັກມາແຕ່ດົນແລ້ວເຊັ່ນ ໂຕສະກາ. ເຊລາປູຕົນ, ເຊເວລີ,
ໂບໂກຍາບ ເລັນສະກີ ແລະອີກຈຳນວນຫນຶ່ງ ກໍແມ່ນພວກມາ
ໃຫມ່ຄື ລາປົດ, ຊາຣີບສະກີ, ໂຣມັນເຊັນໂກ, ມາຊາເຣັນໂກ,
ແວກສະແລ. ຄົນພວກນີ້ລ້ວນແຕ່ແມ່ນນາຍກອງໃນອະນາຄົດທັງ
ນັ້ນ ແລະເປັນນັກອອກແຮງງານຜູ້ທ້າວທັນໃນອະນາຄົດ: ນັບແຕ່
ບັດນີ້ເປັນຕົ້ນໄປ ພວກເຂົາເລີ່ມຮັບຫນ້າທີ່ເປັນນາຍກອງພິເສດ
ແລ້ວ.

ກຸ່ມຕ່າງໆທີ່ເລົ່າຜ່ານມານີ້ປະກອບຕົວເປັນພາກສ່ວນໃຫຍ່ ຂອງ
ຫນ່ວຍຊີວິດໂຮມຫມູ່ຂອງພວກເຮົາ. ຍ້ອນວ່າພວກເຂົາມີກຳລັງ
ໃຈເຂັ້ມແຂງ ມີຄວາມຮອບຮູ້ ແລະບົດຮຽນຢ່າງກ້ວາງຂວາງ ແລ້ວ
ກຸ່ມນີ້ຈຶ່ງເຂັ້ມແຂງເປັນພິເສດ ຈັ່ງຊັ້ນເດັກນ້ອຍອື່ນໆ ຈຶ່ງບໍ່ສາມາດ
ຂັດຂວາງ ບາດກ້າວເດີນຂອງພວກເຂົາ. ໃນຫມູ່ເດັກນ້ອຍທີ່ຢູ່
ນອກເຫນືອຈາກກຸ່ມເຫລົ່ານີ້ແລ້ວ ພວກເຂົາຍັງພາກັນຈັດກັນເອງ
ເປັນອີກສາມກຸ່ມຄື "ຂີ້ສະຫນິມ", "ບັກແອ" ແລະ "ພວກຂີ້
ກ່ອຍ". ໃນກຸ່ມຂີ້ສະຫນິມນັ້ນ ແມ່ນພວກເດັກນ້ອຍປະເພດບໍ່ມີຈຸດ
ເດັ່ນໃດໆອອກມາ ແມ່ນພວກສັດບໍ່ມີກະດູກ, ແມ່ນຈຳພວກທີ່ບໍ່ມີ
ຄວາມແນ່ໃຈວ່າຕົນເອງເປັນຊາວນິຄົມນັ້ນເອງ.

ເຖິງຢ່າງໃດກໍຕາມຍັງພໍເວົ້າໄດ້ວ່າຢູ່ໃນກຸ່ມຂີ້ສະຫນິມນີ້ ມີບຸກ
ຄົນທີ່ມີຈຸດເດັ່ນລອຍຟູຂຶ້ນມາຢູ່ແລະໂດຍທົ່ວໄປເລື່ອງທີ່ວ່າ ມີເດັກ

ນ້ອຍໄປຕົກກຸ່ມຂີ້ສະຫນົມກໍຫາກເປັນໄປໃນລັກສະນະຊົ່ວຄາວເທົ່າ
ນັ້ນ ໄລຍະຫນຶ່ງພວກເຂົາປະກອບດ້ວຍພວກນັກຮຽນສ່ວນຫລວງ
ຫລາຍຂອງນິຄົມໃຫມ່. ພວກນ້ອຍໆມີຢູ່ນໍາກັນ ປະມານສິບຫ້າຄົນ;
ໃນສາຍຕາຂອງພວກນິຄົມ ເດັກນ້ອຍເຫລົ່ານີ້ເປັນຄ້າຍຄືວັດຖຸດິບ
ຊະນິດຫນຶ່ງ ເຊິ່ງຫນ້າທີ່ຕົ້ນຕໍຂອງພວກເຂົາ ແມ່ນຮຽນເຊັດຂີ້
ມູກ. ພວກ "ບັກແອ" ບໍ່ສົນໃຈໄຝ່ຝັນວ່າຢາກຮຸ່ງເຮືອງໃນກິດ
ຈະກໍາພິເສດໃດຫນຶ່ງໂດຍສະເພາະເລີຍ, ໃນສາຍຕາຂອງພວກເຂົາ
ແລ້ວ ການຫລິ້ນຫີວ, ການພາຍເຮືອ, ການແລ່ນນໍ້າກ້ອນ, ການ
ຕົກປາ, ລາກລໍ້ເລື່ອນແລະແມວອື່ນໆອີກ ແມ່ນພຽງພໍແລ້ວ ສໍາລັບ
ພວກເຂົາ. ຂ້າພະເຈົ້າເອງ ກໍຖືວ່າພວກເຂົາມີເຫດຜົນດີສົມຄວນ.

ພວກ "ຂີ້ກ່ອຍ" ປະກອບດ້ວຍສະມາຊິກ ໑໕ ຄົນ ຄື ການາ
ແຕ້ງໂກ, ເປເຣເປລງດເຊັນໂກ. ເອິບເກເນັບ, ກູດສະໂຕຍວັນ
ແລະຕື່ມອີກຫນໍຫນຶ່ງ. ສະມາຊິກໂຮມຫມູ່ ເຫັນເປັນເອກະສັນກັນ
ວ່າສົມຄວນຈັດພວກເຂົາໄວ້ໃນກຸ່ມນີ້ ຫລັງຈາກໄດ້ເຫັນນິໄສຊົ່ວ
ຂອງພວກເຂົາມາຈົນເຕັມຕາແລ້ວເຊັ່ນ ການາແຕ້ງໂກ ຫນໍນີ້ນັກ
ກິນ ແລະຂີ້ແປະທີ່ສຸດ, ເອິບເກເນັບ ສະແດງຕົວຈະແຈ້ງວ່າເປັນ
ພະຍາດປະສາດ, ເຂົາມັກໄປ່ ແລະຂີ້ຕົວະສະເຫມີ, ເປເຣເປລງດ
ເຊັນໂກ ຂີ້ພະຍາດ, ຂີ້ໂຍ່ຍ, ສໍາອອຍ, ກູດສະໂຕຍວັນ ບໍ່ມີສະ
ຫມອງ ແລະເປັນໂລກຈິດຢ່າງຫນຶ່ງ. ມັນນິບໄຫວ້ອອນພະນາງພິມ
ມະຈະລີ ແລະຝັນຫາວັດວາອາຮາມຕະຫລອດເວລາ. ອາໄສວັນ
ເວລາລ່ວງໄປດົນເຕີບ, ພວກຂີ້ກ່ອຍຊົ່ວອາບເອື່ອບດ້ວຍຄວາມຊົ່ວ

ຮ້າຍຕ່າງໆ ບາງຄົນກໍສາມາດຜ່ານຜ່າລະດັ້ນນີ້ໄສເກົ່າໆໄປໄດ້ ແຕ່ ພວກເຂົາຕ້ອງໃຊ້ເວລາຢູ່ຄົນເຕີບ.

ນີ້ແມ່ນສະພາບຄໍາລ້ຳຊື່ວິດແບບໂຮມຫມູ່ຂອງພວກເຮົາໃນທ້າຍ ປີ ໑໙໘໓. ເບິ່ງຮູບນອກນັກຮຽນຂອງພວກເຮົາຍົກເວັ້ນໃນບາງ ກໍລະນີມີລະບຽບວິໄນດີ ທັງນຸ່ງເຄື່ອງແບບທະຫານສະແດງການສວນ ສະຫນາມໄດ້ຢ່າງຖືກຕ້ອງ. ໃນອັນບຸນຕ່າງໆ ພວກເຮົາໄປຢ່າງສວນ ສະຫນາມຢ່າງມີລະບຽບຈົບງາມປະກອບດ້ວຍສາງແກ ຈາກນັກຄົນ ຕີຜູ້ຫນຸ່ມນ້ອຍສີ່ຄົນ ແລະນັກຕີກອງອີກແປດຄົນ. ພວກເຮົາຍັງມີ ຜ້ນຫຸງ ເປັນແພເນື້ອງາມແສ່ວສອດດ້ວຍເສັ້ນໄຫມທຸກເສັ້ນ ເປັນ ຂອງຂວັນທີ່ພວກເຮົາໄດ້ຮັບຈາກກະຊວງສຶກສາປະຊາຊົນອູກຣາອິນ ໃນໂອກາດວັນສະເຫລີມສະຫລອງຄົບຮອບ ໓໕ ປີຂອງພວກເຮົາ.

ໃນອັນບຸນຕ່າງໆຂອງຊາວກໍາມາຊິບ ສະມາຊິກນິຄົມເດີນແກວ ເຂົ້າໃນເມືອງທ່າມກາງສຽງກອງຄຶກຄື້ນ ເຮັດໃຫ້ປະຊາຊົນຊາວ ເມືອງກັບນັກສຶກສາສາດຂັ້ນໃຈທັງຫລາຍຕື່ນສະເງີ້ນຳຄວາມງາມ ອັນມີລະບຽບຂອງກັນແກວ, ວິໄນເຄັ່ງຄັດ ແລະວາດທ່າສະຫງ່າ ງາມພິເສດຂອງພວກເຂົາ. ສ່ວນຫລວງຫລາຍແລ້ວ ພວກເຮົາ ເຄື່ອນຂະບວນມາຮອດເດີ່ນພິທີນຳຫລັງຫມູ່ ທັງນັ້ນກໍເພື່ອຈະບໍ່ໄດ້ ຄອງຄອຍໃຜອີກ ແລະຢືນຂາແຂງໃນທ່າ "ຢືນກົງ", ນັກເບິ່ງແກ ຂອງພວກເຮົາສົ່ງສຽງຄໍານັບໄປຍັງຊາວຜູ້ອອກແຮງງານທົ່ວເມືອງ ແລ້ວພວກເດັກນ້ອຍກໍພາກັນຍົກມືຂຶ້ນເພື່ອບຽ, ຕໍ່ມາຈຶ່ງແຕກແກວ ເພື່ອໃຫ້ແຕ່ລະຄົນແລ່ນໄປສະແຫວງຫາຄວາມມ່ວນຊື່ນອອນຊອນ ຂອງອັນບຸນ ແຕ່ຢູ່ເທິງບ່ອນຕັ້ງແກວນັ້ນ ຜູ້ກຸ້ງກັບນາຍຍາມຍັງຄົງ

ຢືນຈ້ຳ ບໍ່ເຫນັ້ງບໍ່ຕ້ຽງຢູ່ຂອງເກົ່າ ສ່ວນຢູ່ສິ້ນເກວສຸດທ້າຍແມ່ນນາຍ
ຍາມນ້ອຍຄົນຫນຶ່ງ. ສິ່ງດົ່ງກ່າວນີ້ເບິ່ງແລ້ວຫນ້າປະທັບໃຈຫລາຍ
ແທ້ໆ ເພາະວ່າຜ່ານມາ ບໍ່ເຄີຍມີໃຜຄຶດອອກວ່າຈະມາຢືນຢູ່ໃນເດີ່ນ
ແຄບໆບ່ອນນີ້ໄດ້ຈັກເທື່ອ. ພວກເຮົາເອົາຊະນະຄວາມທຸກຍາກ ໃນ
ເລື່ອງການນຸ່ງກິນໄດ້ຢ່າງງ່າຍດາຍ ໂດຍອາໄສຄວາມສະຫລຽວສະ
ຫລາດແລະຄວາມກ້າຫານຂອງພວກເຮົາເອງ. ພວກເຮົາ
ຕ້ານທານສຸດຂີດເຄື່ອງນຸ່ງຈຳພວກຜ້າປ່ານ ມັນແມ່ນເຄື່ອງນຸ່ງສະ
ເພາະທີ່ຫນ້າອະເຫຍື່ອງທີ່ສຸດຂອງນັກຮຽນຢູ່ເຮືອນລ້ຽງເດັກກຳພ້າ,
ແຕ່ເຖິງຢ່າງໃດກໍຕາມພວກເຮົາຍັງບໍ່ສາມາດຫາເຄື່ອງແບບທີ່ງາມ
ກ່ວາດີກ່ວາມານຸ່ງໄດ້ ແມ່ນແຕ່ເກີບໃຫມ່ກໍຫາມາໃສ່ບໍ່ໄດ້. ດັ່ງນັ້ນ
ພວກເຮົາຈຶ່ງໄປຮ່ວມການເດີນສວນສະຫນາມດ້ວຍການຍ່າງຕີນ
ເປົ່າແຕ່ສິ່ງດົ່ງກ່າວກາຍເປັນຄືເລື່ອງຕ້ຳພາໂລເຮັດເອົາ. ເສື້ອຂາວ
ແຂນຍາວຂອງເດັກນ້ອຍຂາວພ່ອງແຈ່ມໃສສະອາດດີ, ພວກເຂົາ
ໃສ່ສ້ຳຂາຍາວສີດຳ ຜ້າເນັ້ອດີກ້ັພັນຂ້ົນຮອດຫົວເຂົ່າເຜີຍໃຫ້ເຫັນ
ຜ້າຮອງສີຂາວຢູ່ດ້ານໃນ. ແຂນເສື້ອກ້ໍ້ຂ້ົນໄວ້ຮອດຂໍ້ສອກເຊ່ັນ
ກັນ. ເບິ່ງແລ້ວທ້ັງຫມົດນີ້ເຮັດໃຫ້ພວກເຂົາເຈ້ົາຊ້ໍສະຫງ່ຳງາມ
ແຈ່ມໃສ້ຶ້ນແທ້ໆ ທ້ັງຝ່ອງາດທ່ຳແບບຊ່ຳອບ້ານນ່ຳ.

ມາເຖິງວັນທີ ມີ ຕຸລາ ໑໙໘ມ ກັນເກວດົ່ງກ່າວກໍ້ຕ້ັງຢາຍຢູ່
ເທິງເດີ່ນກາງຂອງນິຄົມ, ວັນນັ້ນແມ່ນວັນສຸດທ້າຍຂອງປະຕິບັດ
ການສ້ບສິບກ່ວາຫມູ່ຢ່າງຫນຶ່ງ ເຊ່ິງກິນເວລາມາສາມອາທິດແລ້ວ.
ອ້ີງໃສ່ການຕົກລົງໃນກອງປະຊຸມຮ່ວມລະຫວ່າງສະພາຄູ ແລະສະ
ພານາຍກອງ, ນິຄົມກ້ອກກີ ຕ້ອງຍ້າຍຄ້ົວຕ້ົວເອງໄປຢູ່ເຄຫາສະ

ການແຕ່ງແກ ແລະສ້ອມແຊມເຮືອນຕົກເກົ່າແຄມຫນອງ ຣາກິດໂມ ເຢນີ້ໃຫ້ຢູ່ພາຍໃຕ້ການດູແລຂອງພະແນກສຶກສາປະຊາຊົນ. ມາຮອດ ວັນທີ ມີ ຕຸລາ ທຸກສິ່ງທຸກຢ່າງກໍ່ກເຄື່ອນຍ້າຍໄປນິຄົມໃຫມ່ແລ້ວ ເຊັ່ນ ໂຮງຊ່າງ, ເລົ້າ, ໂຮງລີດ. ຄອກມ້າ, ສາງ, ເຄື່ອງຂອງພະ ນັກງານ, ໂຮງອາຫານ, ເຮືອນຄົວແລະໂຮງຮຽນ. ໃນເຊົ້າມື້ນັ້ນ ຈຶ່ງຍັງຄົງເຫລືອແຕ່ເດັກນ້ອຍກຸ່ມຫນຶ່ງປະມານ ๕๐ ຄົນກັບຂ້າພະ ເຈົ້າແລະທຸງ.

ເວລາ ๑๘ ໂມງກົງ ຜູ້ຕາງຫນ້າຈາກພະແນກສຶກສາປະຊາ ຊົນລົງລາຍເຊັນຮັບເອົາອາຄານທັງຫມົດຂອງນິຄົມກ້ອກກີ ແລ້ວ ຖອຍອອກມາຢູ່ຫ່າງໆ, ຂ້າພະເຈົ້າອອກຄໍາສັ່ງວ່າ:

-ເຄົາລົບທຸງ! ກົງ!

ພວກເດັກນ້ອຍຢືນກົງ ໂຕຊື່ແບບທະຫານ ໃນຂະນະທີ່ກອງຕີ ລ້ອຂຶ້ນ ແລະແກກໍບັນເລງເພງເດີນເຄົາລົບທຸງ, ເດັກນ້ອຍຫມູ່ ຫນຶ່ງໄປຍົກເອົາຄັນທຸງອອກມາຈາກຫ້ອງການຂອງຂ້າພະເຈົ້າ.

ຢູ່ເດີ່ນນິຄົມໃຫມ່ ພວກພະນັກງານທັງຫມົດ ມາເຕົ້າໂຮມກັນ ລໍ້ຖ້າຢູ່ແລ້ວ ນອກນີ້ຍັງມີຊາວບ້ານປະຊາຊົນມາແຕ່ບ້ານກົງຊາຣອບ ກາ ມາຮ່ວມນໍາຫລາຍຄົນ. ພວກເດັກນ້ອຍຕັ້ງແຖວລົງນັ່ງ ຫນ້າຢູ່ຄອຍຕ້ອນຮັບຄໍານັບທຸງຂອງນິຄົມກ້ອກກີ ຢ່າງສະຫງ່າງາມ ເທົ່າໆກັບແຖວຂອງພວກເຮົາທີ່ເດີນມາ.

ນີ້ແລ້ວ ການກ້າວເຂົ້າສູ່ຊີວິດໃຫມ່ຂອງພວກເຮົາ!

3 p. 10 k.

ອານໂຕນ ເຊມີໂນວິດ ນາກາເຮັນໂກ ເປັນນັກສຶກ
ສາສາດຜູ້ຍິ່ງໃຫຍ່ຂອງສະຫະພາບໂຊວຽດ ທີ່ໄດ້ວາງຫລັກ
ການພື້ນຖານຂອງວິຊາຄຸຸ ແບບໃຫມ່. ຫົວຄິດລິເລີ່ມຂອງ
ເພິ່ນ ໄດ້ຊ່ວຍດັດແປງທິດສະດີກ່ຽວກັບການສຶກສາອົບ
ຮົມ ໃຫ້ສອດຄ່ອງກັບສັງຄົມ ແລະ ຍຸກສະໄຫມ. ອົງການ
ອຸຍ ແນສໂກ ຂອງສະຫະປະຊາຊາດ ໄດ້ມີມະຕິໃຫ້ທົ່ວ
ໂລກທຳການສະເຫລີມສະຫລອງວັນເກີດຄົບຮອບ ๑๐๒
ປີຂອງ ອານໂຕນ ເຊມີໂນວິດ ນາກາເຮັນໂກ ໃນປີ
๑๙๖๘.

ສຳນັກພິມ "ຣາດູກາ"
ມົດສະກູ